


ນະຄອນຫລວງວຽງຈັນ


450 ປ

1560-2010

ນະຄອນຫລວງວຽງຈັນ

450 ປີ


1560-2010



ນະຄອນຫລວງວຽງຈັນ

450 ປີ

1560-2010



ທຸງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ



ສັນຍາລັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ




ສັນຍາລັກ

ນະຄອນຫລວງວຽງຈັນ 450 ປີ

ແຜນທີ່ການປົກຄອງແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ


จีน
CHINE
ມຽນມາ
BIRMANIE
ไทย
THAILANDE
ทะเลจีนใต้
ข.ຜົ້ງສາລີ
ข.ຫລວງນ້ຳທາ
ข.ບໍ່ແກ້ວ
ข.ອຸດົມໄຊ
ข.ຫລວງພະບາງ
ข.ຫົວພັນ
ข.ຊຽງຂວາງ
ข.ໄຊຍະບູລີ
ข.ວຽງຈັນ
ข.ບໍລິຄຳໄຊ
ข.ຄຳມ່ວນ
ข.ສະຫວັນນະເຂດ
ข.ສາລະວັນ
ข.ເຊກອງ
ข.ຈຳປາສັກ
ข.ອັດຕະປື
ອ่าวตังเกี๋ย
Golfe du Tonkin
ถนนหมายเลข 1
ถนนหมายเลข 7
ถนนหมายเลข 8
ถนนหมายเลข 9
ถนนหมายเลข 12
ถนนหมายเลข 13
ถนนหมายเลข 15
ถนนหมายเลข 16
ถนนหมายเลข 18
ถนนหมายเลข 20
ถนนหมายเลข 23
ถนนหมายเลข 24
ถนนหมายเลข 25
ถนนหมายเลข 26
ถนนหมายเลข 27
ถนนหมายเลข 28
ถนนหมายเลข 29
ถนนหมายเลข 31
ถนนหมายเลข 32
ถนนหมายเลข 34
ถนนหมายเลข 35
ถนนหมายเลข 36
ถนนหมายเลข 37
ถนนหมายเลข 38
ถนนหมายเลข 39
ถนนหมายเลข 40
ถนนหมายเลข 41
ถนนหมายเลข 42
ถนนหมายเลข 43
ถนนหมายเลข 44
ถนนหมายเลข 45
ถนนหมายเลข 46
ถนนหมายเลข 47
ถนนหมายเลข 48
ถนนหมายเลข 49
ถนนหมายเลข 50
ถนนหมายเลข 51
ถนนหมายเลข 52
ถนนหมายเลข 53
ถนนหมายเลข 54
ถนนหมายเลข 55
ถนนหมายเลข 56
ถนนหมายเลข 57
ถนนหมายเลข 58
ถนนหมายเลข 59
ถนนหมายเลข 60
ถนนหมายเลข 61
ถนนหมายเลข 62
ถนนหมายเลข 63
ถนนหมายเลข 64
ถนนหมายเลข 65
ถนนหมายเลข 66
ถนนหมายเลข 67
ถนนหมายเลข 68
ถนนหมายเลข 69
ถนนหมายเลข 70
ถนนหมายเลข 71
ถนนหมายเลข 72
ถนนหมายเลข 73
ถนนหมายเลข 74
ถนนหมายเลข 75
ถนนหมายเลข 76
ถนนหมายเลข 77
ถนนหมายเลข 78
ถนนหมายเลข 79
ถนนหมายเลข 80
ถนนหมายเลข 81
ถนนหมายเลข 82
ถนนหมายเลข 83
ถนนหมายเลข 84
ถนนหมายเลข 85
ถนนหมายเลข 86
ถนนหมายเลข 87
ถนนหมายเลข 88
ถนนหมายเลข 89
ถนนหมายเลข 90
ถนนหมายเลข 91
ถนนหมายเลข 92
ถนนหมายเลข 93
ถนนหมายเลข 94
ถนนหมายเลข 95
ถนนหมายเลข 96
ถนนหมายเลข 97
ถนนหมายเลข 98
ถนนหมายเลข 99
ถนนหมายเลข 100
ถนนหมายเลข 101
ถนนหมายเลข 102
ถนนหมายเลข 103
ถนนหมายเลข 104
ถนนหมายเลข 105
ถนนหมายเลข 106
ถนนหมายเลข 107
ถนนหมายเลข 108
ถนนหมายเลข 109
ถนนหมายเลข 110
ถนนหมายเลข 111
ถนนหมายเลข 112
ถนนหมายเลข 113
ถนนหมายเลข 114
ถนนหมายเลข 115
ถนนหมายเลข 116
ถนนหมายเลข 117
ถนนหมายเลข 118
ถนนหมายเลข 119
ถนนหมายเลข 120
ถนนหมายเลข 121
ถนนหมายเลข 122
ถนนหมายเลข 123
ถนนหมายเลข 124
ถนนหมายเลข 125
ถนนหมายเลข 126
ถนนหมายเลข 127
ถนนหมายเลข 128
ถนนหมายเลข 129
ถนนหมายเลข 130
ถนนหมายเลข 131
ถนนหมายเลข 132
ถนนหมายเลข 133
ถนนหมายเลข 134
ถนนหมายเลข 135
ถนนหมายเลข 136
ถนนหมายเลข 137
ถนนหมายเลข 138
ถนนหมายเลข 139
ถนนหมายเลข 140
ถนนหมายเลข 141
ถนนหมายเลข 142
ถนนหมายเลข 143
ถนนหมายเลข 144
ถนนหมายเลข 145
ถนนหมายเลข 146
ถนนหมายเลข 147
ถนนหมายเลข 148
ถนนหมายเลข 149
ถนนหมายเลข 150
ถนนหมายเลข 151
ถนนหมายเลข 152
ถนนหมายเลข 153
ถนนหมายเลข 154
ถนนหมายเลข 155
ถนนหมายเลข 156
ถนนหมายเลข 157
ถนนหมายเลข 158
ถนนหมายเลข 159
ถนนหมายเลข 160
ถนนหมายเลข 161
ถนนหมายเลข 162
ถนนหมายเลข 163
ถนนหมายเลข 164
ถนนหมายเลข 165
ถนนหมายเลข 166
ถนนหมายเลข 167
ถนนหมายเลข 168
ถนนหมายเลข 169
ถนนหมายเลข 170
ถนนหมายเลข 171
ถนนหมายเลข 172
ถนนหมายเลข 173
ถนนหมายเลข 174
ถนนหมายเลข 175
ถนนหมายเลข 176
ถนนหมายเลข 177
ถนนหมายเลข 178
ถนนหมายเลข 179
ถนนหมายเลข 180
ถนนหมายเลข 181
ถนนหมายเลข 182
ถนนหมายเลข 183
ถนนหมายเลข 184
ถนนหมายเลข 185
ถนนหมายเลข 186
ถนนหมายเลข 187
ถนนหมายเลข 188
ถนนหมายเลข 189
ถนนหมายเลข 190
ถนนหมายเลข 191
ถนนหมายเลข 192
ถนนหมายเลข 193
ถนนหมายเลข 194
ถนนหมายเลข 195
ถนนหมายเลข 196
ถนนหมายเลข 197
ถนนหมายเลข 198
ถนนหมายเลข 199
ถนนหมายเลข 200
ถนนหมายเลข 201
ถนนหมายเลข 202
ถนนหมายเลข 203
ถนนหมายเลข 204
ถนนหมายเลข 205
ถนนหมายเลข 206
ถนนหมายเลข 207
ถนนหมายเลข 208
ถนนหมายเลข 209
ถนนหมายเลข 210
ถนนหมายเลข 211
ถนนหมายเลข 212
ถนนหมายเลข 213
ถนนหมายเลข 214
ถนนหมายเลข 215
ถนนหมายเลข 216
ถนนหมายเลข 217
ถนนหมายเลข 218
ถนนหมายเลข 219
ถนนหมายเลข 220
ถนนหมายเลข 221
ถนนหมายเลข 222
ถนนหมายเลข 223
ถนนหมายเลข 224
ถนนหมายเลข 225
ถนนหมายเลข 226
ถนนหมายเลข 227
ถนนหมายเลข 228
ถนนหมายเลข 229
ถนนหมายเลข 230
ถนนหมายเลข 231
ถนนหมายเลข 232
ถนนหมายเลข 233
ถนนหมายเลข 234
ถนนหมายเลข 235
ถนนหมายเลข 236
ถนนหมายเลข 237
ถนนหมายเลข 238
ถนนหมายเลข 239
ถนนหมายเลข 240
ถนนหมายเลข 241
ถนนหมายเลข 242
ถนนหมายเลข 243
ถนนหมายเลข 244
ถนนหมายเลข 245
ถนนหมายเลข 246
ถนนหมายเลข 247
ถนนหมายเลข 248
ถนนหมายเลข 249
ถนนหมายเลข 250
ถนนหมายเลข 251
ถนนหมายเลข 252
ถนนหมายเลข 253
ถนนหมายเลข 254
ถนนหมายเลข 255
ถนนหมายเลข 256
ถนนหมายเลข 257
ถนนหมายเลข 258
ถนนหมายเลข 259
ถนนหมายเลข 260
ถนนหมายเลข 261
ถนนหมายเลข 262
ถนนหมายเลข 263
ถนนหมายเลข 264
ถนนหมายเลข 265
ถนนหมายเลข 266
ถนนหมายเลข 267
ถนนหมายเลข 268
ถนนหมายเลข 269
ถนนหมายเลข 270
ถนนหมายเลข 271
ถนนหมายเลข 272
ถนนหมายเลข 273
ถนนหมายเลข 274
ถนนหมายเลข 275
ถนนหมายเลข 276
ถนนหมายเลข 277
ถนนหมายเลข 278
ถนนหมายเลข 279
ถนนหมายเลข 280
ถนนหมายเลข 281
ถนนหมายเลข 282
ถนนหมายเลข 283
ถนนหมายเลข 284
ถนนหมายเลข 285
ถนนหมายเลข 286
ถนนหมายเลข 287
ถนนหมายเลข 288
ถนนหมายเลข 289
ถนนหมายเลข 290
ถนนหมายเลข 291
ถนนหมายเลข 292
ถนนหมายเลข 293
ถนนหมายเลข 294
ถนนหมายเลข 295
ถนนหมายเลข 296
ถนนหมายเลข 297
ถนนหมายเลข 298
ถนนหมายเลข 299
ถนนหมายเลข 300
ถนนหมายเลข 301
ถนนหมายเลข 302
ถนนหมายเลข 303
ถนนหมายเลข 304
ถนนหมายเลข 305
ถนนหมายเลข 306
ถนนหมายเลข 307
ถนนหมายเลข 308
ถนนหมายเลข 309
ถนนหมายเลข 310
ถนนหมายเลข 311
ถนนหมายเลข 312
ถนนหมายเลข 313
ถนนหมายเลข 314
ถนนหมายเลข 315
ถนนหมายเลข 316
ถนนหมายเลข 317
ถนนหมายเลข 318
ถนนหมายเลข 319
ถนนหมายเลข 320
ถนนหมายเลข 321
ถนนหมายเลข 322
ถนนหมายเลข 323
ถนนหมายเลข 324
ถนนหมายเลข 325
ถนนหมายเลข 326
ถนนหมายเลข 327
ถนนหมายเลข 328
ถนนหมายเลข 329
ถนนหมายเลข 330
ถนนหมายเลข 331
ถนนหมายเลข 332
ถนนหมายเลข 333
ถนนหมายเลข 334
ถนนหมายเลข 335
ถนนหมายเลข 336
ถนนหมายเลข 337
ถนนหมายเลข 338
ถนนหมายเลข 339
ถนนหมายเลข 340
ถนนหมายเลข 341
ถนนหมายเลข 342
ถนนหมายเลข 343
ถนนหมายเลข 344
ถนนหมายเลข 345
ถนนหมายเลข 346
ถนนหมายเลข 347
ถนนหมายเลข 348
ถนนหมายเลข 349
ถนนหมายเลข 350
ถนนหมายเลข 351
ถนนหมายเลข 352
ถนนหมายเลข 353
ถนนหมายเลข 354
ถนนหมายเลข 355
ถนนหมายเลข 356
ถนนหมายเลข 357
ถนนหมายเลข 358
ถนนหมายเลข 359
ถนนหมายเลข 360
ถนนหมายเลข 361
ถนนหมายเลข 362
ถนนหมายเลข 363
ถนนหมายเลข 364
ถนนหมายเลข 365
ถนนหมายเลข 366
ถนนหมายเลข 367
ถนนหมายเลข 368
ถนนหมายเลข 369
ถนนหมายเลข 370
ถนนหมายเลข 371
ถนนหมายเลข 372
ถนนหมายเลข 373
ถนนหมายเลข 374
ถนนหมายเลข 375
ถนนหมายเลข 376
ถนนหมายเลข 377
ถนนหมายเลข 378
ถนนหมายเลข 379
ถนนหมายเลข 380
ถนนหมายเลข 381
ถนนหมายเลข 382
ถนนหมายเลข 383
ถนนหมายเลข 384
ถนนหมายเลข 385
ถนนหมายเลข 386
ถนนหมายเลข 387
ถนนหมายเลข 388
ถนนหมายเลข 389
ถนนหมายเลข 390
ถนนหมายเลข 391
ถนนหมายเลข 392
ถนนหมายเลข 393
ถนนหมายเลข 394
ถนนหมายเลข 395
ถนนหมายเลข 396
ถนนหมายเลข 397
ถนนหมายเลข 398
ถนนหมายเลข 399
ถนนหมายเลข 400
ถนนหมายเลข 401
ถนนหมายเลข 402
ถนนหมายเลข 403
ถนนหมายเลข 404
ถนนหมายเลข 405
ถนนหมายเลข 406
ถนนหมายเลข 407
ถนนหมายเลข 408
ถนนหมายเลข 409
ถนนหมายเลข 410
ถนนหมายเลข 411
ถนนหมายเลข 412
ถนนหมายเลข 413
ถนนหมายเลข 414
ถนนหมายเลข 415
ถนนหมายเลข 416
ถนนหมายเลข 417
ถนนหมายเลข 418
ถนนหมายเลข 419
ถนนหมายเลข 420
ถนนหมายเลข 421
ถนนหมายเลข 422
ถนนหมายเลข 423
ถนนหมายเลข 424
ถนนหมายเลข 425
ถนนหมายเลข 426
ถนนหมายเลข 427
ถนนหมายเลข 428
ถนนหมายเลข 429
ถนนหมายเลข 430
ถนนหมายเลข 431
ถนนหมายเลข 432
ถนนหมายเลข 433
ถนนหมายเลข 434
ถนนหมายเลข 435
ถนนหมายเลข 436
ถนนหมายเลข 437
ถนนหมายเลข 438
ถนนหมายเลข 439
ถนนหมายเลข 440
ถนนหมายเลข 441
ถนนหมายเลข 442
ถนนหมายเลข 443
ถนนหมายเลข 444
ถนนหมายเลข 445
ถนนหมายเลข 446
ถนนหมายเลข 447
ถนนหมายเลข 448
ถนนหมายเลข 449
ถนนหมายเลข 450
ถนนหมายเลข 451
ถนนหมายเลข 452
ถนนหมายเลข 453
ถนนหมายเลข 454
ถนนหมายเลข 455
ถนนหมายเลข 456
ถนนหมายเลข 457
ถนนหมายเลข 458
ถนนหมายเลข 459
ถนนหมายเลข 460
ถนนหมายเลข 461
ถนนหมายเลข 462
ถนนหมายเลข 463
ถนนหมายเลข 464
ถนนหมายเลข 465
ถนนหมายเลข 466
ถนนหมายเลข 467
ถนนหมายเลข 468
ถนนหมายเลข 469
ถนนหมายเลข 470
ถนนหมายเลข 471
ถนนหมายเลข 472
ถนนหมายเลข 473
ถนนหมายเลข 474
ถนนหมายเลข 475
ถนนหมายเลข 476
ถนนหมายเลข 477
ถนนหมายเลข 478
ถนนหมายเลข 479
ถนนหมายเลข 480
ถนนหมายเลข 481
ถนนหมายเลข 482
ถนนหมายเลข 483
ถนนหมายเลข 484
ถนนหมายเลข 485
ถนนหมายเลข 486
ถนนหมายเลข 487
ถนนหมายเลข 488
ถนนหมายเลข 489
ถนนหมายเลข 490
ถนนหมายเลข 491
ถนนหมายเลข 492
ถนนหมายเลข 493
ถนนหมายเลข 494
ถนนหมายเลข 495
ถนนหมายเลข 496
ถนนหมายเลข 497
ถนนหมายเลข 498
ถนนหมายเลข 499
ถนนหมายเลข 500
ถนนหมายเลข 501
ถนนหมายเลข 502
ถนนหมายเลข 503
ถนนหมายเลข 504
ถนนหมายเลข 505
ถนนหมายเลข 506
ถนนหมายเลข 507
ถนนหมายเลข 508
ถนนหมายเลข 509
ถนนหมายเลข 510
ถนนหมายเลข 511
ถนนหมายเลข 512
ถนนหมายเลข 513
ถนนหมายเลข 514
ถนนหมายเลข 515
ถนนหมายเลข 516
ถนนหมายเลข 517
ถนนหมายเลข 518
ถนนหมายเลข 519
ถนนหมายเลข 520
ถนนหมายเลข 521
ถนนหมายเลข 522
ถนนหมายเลข 523
ถนนหมายเลข 524
ถนนหมายเลข 525
ถนนหมายเลข 526
ถนนหมายเลข 527
ถนนหมายเลข 528
ถนนหมายเลข 529
ถนนหมายเลข 530
ถนนหมายเลข 531
ถนนหมายเลข 532
ถนนหมายเลข 533
ถนนหมายเลข 534
ถนนหมายเลข 535
ถนนหมายเลข 536
ถนนหมายเลข 537
ถนนหมายเลข 538
ถนนหมายเลข 539
ถนนหมายเลข 540
ถนนหมายเลข 541
ถนนหมายเลข 542
ถนนหมายเลข 543
ถนนหมายเลข 544
ถนนหมายเลข 545
ถนนหมายเลข 546
ถนนหมายเลข 547
ถนนหมายเลข 548
ถนนหมายเลข 549
ถนนหมายเลข 550
ถนนหมายเลข 551
ถนนหมายเลข 552
ถนนหมายเลข 553
ถนนหมายเลข 554
ถนนหมายเลข 555
ถนนหมายเลข 556
ถนนหมายเลข 557
ถนนหมายเลข 558
ถนนหมายเลข 559
ถนนหมายเลข 560
ถนนหมายเลข 561
ถนนหมายเลข 562
ถนนหมายเลข 563
ถนนหมายเลข 564
ถนนหมายเลข 565
ถนนหมายเลข 566
ถนนหมายเลข 567
ถนนหมายเลข 568
ถนนหมายเลข 569
ถนนหมายเลข 570
ถนนหมายเลข 571
ถนนหมายเลข 572
ถนนหมายเลข 573
ถนนหมายเลข 574
ถนนหมายเลข 575
ถนนหมายเลข 576
ถนนหมายเลข 577
ถนนหมายเลข 578
ถนนหมายเลข 579
ถนนหมายเลข 580
ถนนหมายเลข 581
ถนนหมายเลข 582
ถนนหมายเลข 583
ถนนหมายเลข 584
ถนนหมายเลข 585
ถนนหมายเลข 586
ถนนหมายเลข 587
ถนนหมายเลข 588
ถนนหมายเลข 589
ถนนหมายเลข 590
ถนนหมายเลข 591
ถนนหมายเลข 592
ถนนหมายเลข 593
ถนนหมายเลข 594
ถนนหมายเลข 595
ถนนหมายเลข 596
ถนนหมายเลข 597
ถนนหมายเลข 598
ถนนหมายเลข 599
ถนนหมายเลข 600
ถนนหมายเลข 601
ถนนหมายเลข 602
ถนนหมายเลข 603
ถนนหมายเลข 604
ถนนหมายเลข 605
ถนนหมายเลข 606
ถนนหมายเลข 607
ถนนหมายเลข 608
ถนนหมายเลข 609
ถนนหมายเลข 610
ถนนหมายเลข 611
ถนนหมายเลข 612
ถนนหมายเลข 613
ถนนหมายเลข 614
ถนนหมายเลข 615
ถนนหมายเลข 616
ถนนหมายเลข 617
ถนนหมายเลข 618
ถนนหมายเลข 619
ถนนหมายเลข 620
ถนนหมายเลข 621
ถนนหมายเลข 622
ถนนหมายเลข 623
ถนนหมายเลข 624
ถนนหมายเลข 625
ถนนหมายเลข 626
ถนนหมายเลข 627
ถนนหมายเลข 628
ถนนหมายเลข 629
ถนนหมายเลข 630
ถนนหมายเลข 631
ถนนหมายเลข 632
ถนนหมายเลข 633
ถนนหมายเลข 634
ถนนหมายเลข 635
ถนนหมายเลข 636
ถนนหมายเลข 637
ถนนหมายเลข 638
ถนนหมายเลข 639
ถนนหมายเลข 640
ถนนหมายเลข 641
ถนนหมายเลข 642
ถนนหมายเลข 643
ถนนหมายเลข 644
ถนนหมายเลข 645
ถนนหมายเลข 646
ถนนหมายเลข 647
ถนนหมายเลข 648
ถนนหมายเลข 649
ถนนหมายเลข 650
ถนนหมายเลข 651
ถนนหมายเลข 652
ถนนหมายเลข 653
ถนนหมายเลข 654
ถนนหมายเลข 655
ถนนหมายเลข 656
ถนนหมายเลข 657
ถนนหมายเลข 658
ถนนหมายเลข 659
ถนนหมายเลข 660
ถนนหมายเลข 661
ถนนหมายเลข 662
ถนนหมายเลข 663
ถนนหมายเลข 664
ถนนหมายเลข 665
ถนนหมายเลข 666
ถนนหมายเลข 667
ถนนหมายเลข 668
ถนนหมายเลข 669
ถนนหมายเลข 670
ถนนหมายเลข 671
ถนนหมายเลข 672
ถนนหมายเลข 673
ถนนหมายเลข 674
ถนนหมายเลข 675
ถนนหมายเลข 676
ถนนหมายเลข 677
ถนนหมายเลข 678
ถนนหมายเลข 679
ถนนหมายเลข 680
ถนนหมายเลข 681
ถนนหมายเลข 682
ถนนหมายเลข 683
ถนนหมายเลข 684
ถนนหมายเลข 685
ถนนหมายเลข 686
ถนนหมายเลข 687
ถนนหมายเลข 688
ถนนหมายเลข 689
ถนนหมายเลข 690
ถนนหมายเลข 691
ถนนหมายเลข 692
ถนนหมายเลข 693
ถนนหมายเลข 694
ถนนหมายเลข 695
ถนนหมายเลข 696
ถนนหมายเลข 697
ถนนหมายเลข 698
ถนนหมายเลข 699
ถนนหมายเลข 700
ถนนหมายเลข 701
ถนนหมายเลข 702
ถนนหมายเลข 703
ถนนหมายเลข 704
ถนนหมายเลข 705
ถนนหมายเลข 706
ถนนหมายเลข 707
ถนนหมายเลข 708
ถนนหมายเลข 709
ถนนหมายเลข 710
ถนนหมายเลข 711
ถนนหมายเลข 712
ถนนหมายเลข 713
ถนนหมายเลข 714
ถนนหมายเลข 715
ถนนหมายเลข 716
ถนนหมายเลข 717
ถนนหมายเลข 718
ถนนหมายเลข 719
ถนนหมายเลข 720
ถนนหมายเลข 721
ถนนหมายเลข 722
ถนนหมายเลข 723
ถนนหมายเลข 724
ถนนหมายเลข 725
ถนนหมายเลข 726
ถนนหมายเลข 727
ถนนหมายเลข 728
ถนนหมายเลข 729
ถนนหมายเลข 730
ถนนหมายเลข 731
ถนนหมายเลข 732
ถนนหมายเลข 733
ถนนหมายเลข 734
ถนนหมายเลข 735
ถนนหมายเลข 736
ถนนหมายเลข 737
ถนนหมายเลข 738
ถนนหมายเลข 739
ถนนหมายเลข 740
ถนนหมายเลข 741
ถนนหมายเลข 742
ถนนหมายเลข 743
ถนนหมายเลข 744
ถนนหมายเลข 745
ถนนหมายเลข 746
ถนนหมายเลข 747
ถนนหมายเลข 748
ถนนหมายเลข 749
ถนนหมายเลข 750
ถนนหมายเลข 751
ถนนหมายเลข 752
ถนนหมายเลข 753
ถนนหมายเลข 754
ถนนหมายเลข 755
ถนนหมายเลข 756
ถนนหมายเลข 757
ถนนหมายเลข 758
ถนนหมายเลข 759
ถนนหมายเลข 760
ถนนหมายเลข 761
ถนนหมายเลข 762
ถนนหมายเลข 763
ถนนหมายเลข 764
ถนนหมายเลข 765
ถนนหมายเลข 766
ถนนหมายเลข 767
ถนนหมายเลข 768
ถนนหมายเลข 769
ถนนหมายเลข 770
ถนนหมายเลข 771
ถนนหมายเลข 772
ถนนหมายเลข 773
ถนนหมายเลข 774
ถนนหมายเลข 775
ถนนหมายเลข 776
ถนนหมายเลข 777
ถนนหมายเลข 778
ถนนหมายเลข 779
ถนนหมายเลข 780
ถนนหมายเลข 781
ถนนหมายเลข 782
ถนนหมายเลข 783
ถนนหมายเลข 784
ถนนหมายเลข 785
ถนนหมายเลข 786
ถนนหมายเลข 787
ถนนหมายเลข 788
ถนนหมายเลข 789
ถนนหมายเลข 790
ถนนหมายเลข 791
ถนนหมายเลข 792
ถนนหมายเลข 793
ถนนหมายเลข 794
ถนนหมายเลข 795
ถนนหมายเลข 796
ถนนหมายเลข 797
ถนนหมายเลข 798
ถนนหมายเลข 799
ถนนหมายเลข 800
ถนนหมายเลข 801
ถนนหมายเลข 802
ถนนหมายเลข 803
ถนนหมายเลข 804
ถนนหมายเลข 805
ถนนหมายเลข 806
ถนนหมายเลข 807
ถนนหมายเลข 808
ถนนหมายเลข 809
ถนนหมายเลข 810
ถนนหมายเลข 811
ถนนหมายเลข 812
ถนนหมายเลข 813
ถนนหมายเลข 814
ถนนหมายเลข 815
ถนนหมายเลข 816
ถนนหมายเลข 817
ถนนหมายเลข 818
ถนนหมายเลข 819
ถนนหมายเลข 820
ถนนหมายเลข 821
ถนนหมายเลข 822
ถนนหมายเลข 823
ถนนหมายเลข 824
ถนนหมายเลข 825
ถนนหมายเลข 826
ถนนหมายเลข 827
ถนนหมายเลข 828
ถนนหมายเลข 829
ถนนหมายเลข 830
ถนนหมายเลข 831
ถนนหมายเลข 832
ถนนหมายเลข 833
ถนนหมายเลข 834
ถนนหมายเลข 835
ถนนหมายเลข 836
ถนนหมายเลข 837
ถนนหมายเลข 838
ถนนหมายเลข 839
ถนนหมายเลข 840
ถนนหมายเลข 841
ถนนหมายเลข 842
ถนนหมายเลข 843
ถนนหมายเลข 844
ถนนหมายเลข 845
ถนนหมายเลข 846
ถนนหมายเลข 847
ถนนหมายเลข 848
ถนนหมายเลข 849
ถนนหมายเลข 850
ถนนหมายเลข 851
ถนนหมายเลข 852
ถนนหมายเลข 853
ถนนหมายเลข 854
ถนนหมายเลข 855
ถนนหมายเลข 856
ถนนหมายเลข 857
ถนนหมายเลข 858
ถนนหมายเลข 859
ถนนหมายเลข 860
ถนนหมายเลข 861
ถนนหมายเลข 862
ถนนหมายเลข 863
ถนนหมายเลข 864
ถนนหมายเลข 865
ถนนหมายเลข 866
ถนนหมายเลข 867
ถนนหมายเลข 868
ถนนหมายเลข 869
ถนนหมายเลข 870
ถนนหมายเลข 871
ถนนหมายเลข 872
ถนนหมายเลข 873
ถนนหมายเลข 874
ถนนหมายเลข 875
ถนนหมายเลข 876
ถนนหมายเลข 877
ถนนหมายเลข 878
ถนนหมายเลข 879
ถนนหมายเลข 880
ถนนหมายเลข 881
ถนนหมายเลข 882
ถนนหมายเลข 883
ถนนหมายเลข 884
ถนนหมายเลข 885
ถนนหมายเลข 886
ถนนหมายเลข 887
ถนนหมายเลข 888
ถนนหมายเลข 889
ถนนหมายเลข 890
ถนนหมายเลข 891
ถนนหมายเลข 892
ถนนหมายเลข 893
ถนนหมายเลข 894
ถนนหมายเลข 895
ถนนหมายเลข 896
ถนนหมายเลข 897
ถนนหมายเลข 898
ถนนหมายเลข 899
ถนนหมายเลข 900
ถนนหมายเลข 901
ถนนหมายเลข 902
ถนนหมายเลข 903
ถนนหมายเลข 904
ถนนหมายเลข 905
ถนนหมายเลข 906
ถนนหมายเลข 907
ถนนหมายเลข 908
ถนนหมายเลข 909
ถนนหมายเลข 910
ถนนหมายเลข 911
ถนนหมายเลข 912
ถนนหมายเลข 913
ถนนหมายเลข 914
ถนนหมายเลข 915
ถนนหมายเลข 916
ถนนหมายเลข 917
ถนนหมายเลข 918
ถนนหมายเลข 919
ถนนหมายเลข 920
ถนนหมายเลข 921
ถนนหมายเลข 922
ถนนหมายเลข 923
ถนนหมายเลข 924
ถนนหมายเลข 925
ถนนหมายเลข 926
ถนนหมายเลข 927
ถนนหมายเลข 928
ถนนหมายเลข 929
ถนนหมายเลข 930
ถนนหมายเลข 931
ถนนหมายเลข 932
ถนนหมายเลข 933
ถนนหมายเลข 934
ถนนหมายเลข 935
ถนนหมายเลข 936
ถนนหมายเลข 937
ถนนหมายเลข 938
ถนนหมายเลข 939
ถนนหมายเลข 940
ถนนหมายเลข 941
ถนนหมายเลข 942
ถนนหมายเลข 943
ถนนหมายเลข 944
ถนนหมายเลข 945
ถนนหมายเลข 946
ถนนหมายเลข 947
ถนนหมายเลข 948
ถนนหมายเลข 949
ถนนหมายเลข 950
ถนนหมายเลข 951
ถนนหมายเลข 952
ถนนหมายเลข 953
ถนนหมายเลข 954
ถนนหมายเลข 955
ถนนหมายเลข 956
ถนนหมายเลข 957
ถนนหมายเลข 958
ถนนหมายเลข 959
ถนนหมายเลข 960
ถนนหมายเลข 961
ถนนหมายเลข 962
ถนนหมายเลข 963
ถนนหมายเลข 964
ถนนหมายเลข 965
ถนนหมายเลข 966
ถนนหมายเลข 967
ถนนหมายเลข 968
ถนนหมายเลข 969
ถนนหมายเลข 970
ถนนหมายเลข 971
ถนนหมายเลข 972
ถนนหมายเลข 973
ถนนหมายเลข 974
ถนนหมายเลข 975
ถนนหมายเลข 976
ถนนหมายเลข 977
ถนนหมายเลข 978
ถนนหมายเลข 979
ถนนหมายเลข 980
ถนนหมายเลข 981
ถนนหมายเลข 982
ถนนหมายเลข 983
ถนนหมายเลข 984
ถนนหมายเลข 985
ถนนหมายเลข 986
ถนนหมายเลข 987
ถนนหมายเลข 988
ถนนหมายเลข 989
ถนนหมายเลข 990
ถนนหมายเลข 991
ถนนหมายเลข 992
ถนนหมายเลข 993
ถนนหมายเลข 994
ถนนหมายเลข 995
ถนนหมายเลข 996
ถนนหมายเลข 997
ถนนหมายเลข 998
ถนนหมายเลข 999
ถนนหมายเลข 1000
ถนนหมายเลข 1001
ถนนหมายเลข 1002
ถนนหมายเลข 1003
ถนนหมายเลข 1004
ถนนหมายเลข 1005
ถนนหมายเลข 1006
ถนนหมายเลข 1007
ถนนหมายเลข 1008
ถนนหมายเลข 1009
ถนนหมายเลข 1010
ถนนหมายเลข 1011
ถนนหมายเลข 1012
ถนนหมายเลข 1013
ถนนหมายเลข 1014
ถนนหมายเลข 1015
ถนนหมายเลข 1016
ถนนหมายเลข 1017
ถนนหมายเลข 1018
ถนนหมายเลข 1019
ถนนหมายเลข 1020
ถนนหมายเลข 1021
ถนนหมายเลข 1022
ถนนหมายเลข 1023
ถนนหมายเลข 1024
ถนนหมายเลข 1025
ถนนหมายเลข 1026
ถนนหมายเลข 1027
ถนนหมายเลข 1028
ถนนหมายเลข 1029
ถนนหมายเลข 1030
ถนนหมายเลข 1031
ถนนหมายเลข 1032
ถนนหมายเลข 1033
ถนนหมายเลข 1034
ถนนหมายเลข 1035
ถนนหมายเลข 1036
ถนนหมายเลข 1037
ถนนหมายเลข 1038
ถนนหมายเลข 1039
ถนนหมายเลข 1040
ถนนหมายเลข 1041
ถนนหมายเลข 1042
ถนนหมายเลข 1043
ถนนหมายเลข 1044
ถนนหมายเลข 1045
ถนนหมายเลข 1046
ถนนหมายเลข 1047
ถนนหมายเลข 1048
ถนนหมายเลข 1049
ถนนหมายเลข 1050
ถนนหมายเลข 1051
ถนนหมายเลข 1052
ถนนหมายเลข 1053
ถนนหมายเลข 1054
ถนนหมายเลข 1055
ถนนหมายเลข 1056
ถนนหมายเลข 1057
ถนนหมายเลข 1058
ถนนหมายเลข 1059
ถนนหมายเลข 1060
ถนนหมายเลข 1061
ถนนหมายเลข 1062
ถนนหมายเลข 1063
ถนนหมายเลข 1064
ถนนหมายเลข 1065
ถนนหมายเลข 1066
ถนนหมายเลข 1067
ถนนหมายเลข 1068
ถนนหมายเลข 1069
ถนนหมายเลข 1070
ถนนหมายเลข 1071
ถนนหมายเลข 1072
ถนนหมายเลข 1073
ถนนหมายเลข 1074
ถนนหมายเลข 1075
ถนนหมายเลข 1076
ถนนหมายเลข 1077
ถนนหมายเลข 1078
ถนนหมายเลข 1079
ถนนหมายเลข 1080
ถนนหมายเลข 1081
ถนนหมายเลข 1082
ถนนหมายเลข 1083
ถนนหมายเลข 1084
ถนนหมายเลข 1085
ถนนหมายเลข 1086
ถนนหมายเลข 1087
ถนนหมายเลข 1088
ถนนหมายเลข 1089
ถนนหมายเลข 1090
ถนนหมายเลข 1091
ถนนหมายเลข 1092
ถนนหมายเลข 1093
ถนนหมายเลข 1094
ถนนหมายเลข 1095
ถนนหมายเลข 1096
ถนนหมายเลข 1097
ถนนหมายเลข 1098
ถนนหมายเลข 1099
ถนนหมายเลข 1100
ถนนหมายเลข 1101
ถนนหมายเลข 1102
ถนนหมายเลข 1103
ถนนหมายเลข 1104
ถนนหมายเลข 1105
ถนนหมายเลข 1106
ถนนหมายเลข 1107
ถนนหมายเลข 1108
ถนนหมายเลข 1109
ถนนหมายเลข 1110
ถนนหมายเลข 1111
ถนนหมายเลข 1112
ถนนหมายเลข 1113
ถนนหมายเลข 1114
ถนนหมายเลข 1115
ถนนหมายเลข 1116
ถนนหมายเลข 1117
ถนนหมายเลข 1118
ถนนหมายเลข 1119
ถนนหมายเลข 1120
ถนนหมายเลข 1121
ถนนหมายเลข 1122
ถนนหมายเลข 1123
ถนนหมายเลข 1124
ถนนหมายเลข 1125
ถนนหมายเลข 1126
ถนนหมายเลข 1127
ถนนหมายเลข 1128
ถนนหมายเลข 1129
ถนนหมายเลข 1130
ถนนหมายเลข 1131
ถนนหมายเลข 1132
ถนนหมายเลข 1133
ถนนหมายเลข 1134
ถนนหมายเลข 1135
ถนนหมายเลข 1136
ถนนหมายเลข 1137
ถนนหมายเลข 1138
ถนนหมายเลข 1139
ถนนหมายเลข 1140
ถนนหมายเลข 1141
ถนนหมายเลข 1142
ถนนหมายเลข 1143
ถนนหมายเลข 1144
ถนนหมายเลข 1145
ถนนหมายเลข 1146
ถนนหมายเลข 1147
ถนนหมายเลข 1148
ถนนหมายเลข 1149
ถนนหมายเลข 1150
ถนนหมายเลข 1151
ถนนหมายเลข 1152
ถนนหมายเลข 1153
ถนนหมายเลข 1154
ถนนหมายเลข 1155
ถนนหมายเลข 1156
ถนนหมายเลข 1157
ถนนหมายเลข 1158
ถนนหมายเลข 1159
ถนนหมายเลข 1160
ถนนหมายเลข 1161
ถนนหมายเลข 1162
ถนนหมายเลข 1163
ถนนหมายเลข 1164
ถนนหมายเลข 1165
ถนนหมายเลข 1166
ถนนหมายเลข 1167
ถนนหมายเลข 1168
ถนนหมายเลข 1169
ถนนหมายเลข 1170
ถนนหมายเลข 1171
ถนนหมายเลข 1172
ถนนหมายเลข 1173
ถนนหมายเลข 1174
ถนนหมายเลข 1175
ถนนหมายเลข 1176
ถนนหมายเลข 1177
ถนนหมายเลข 1178
ถนนหมายเลข 1179
ถนนหมายเลข 1180
ถนนหมายเลข 1181
ถนนหมายเลข 1182
ถนนหมายเลข 1183
ถนนหมายเลข 1184
ถนนหมายเลข 1185
ถนนหมายเลข 1186
ถนนหมายเลข 1187
ถนนหมายเลข 1188
ถนนหมายเลข 1189
ถนนหมายเลข 1190
ถนนหมายเลข 1191
ถนนหม





ນະຄອນຫລວງ ວຽງຈັນ 450 ປີ

ຄົ້ນຄວ້າ ຮີບໂຮມ ແລະ ຈັດພິມ : ຄະນະອະນຸກຳມະການ ທິບທອນ, ຮີບໂຮມ ແລະ ຊຽນ ປະຫວັດສາດ ນະຄອນຫລວງວຽງຈັນ 450 ປີ

ກວດຜ່ານ : ທ່ານ ສົມສະຫວາດ ເລັ່ງສະຫວັດ

: ທ່ານ ສົມບັດ ເຢຍລີເຮີ

: ທ່ານ ດຣ ສິນລະວົງ ຄຸດໄພທູນ

ຄະນະຊີ້ນຳ ພິມ : ທ່ານ ດວງດີ ອຸດທະຈັກ

: ທ່ານ ບົວບານ ວໍລະຊຸນ

: ທ່ານ ນາງ ດາລາ ກັນລະຍາ

: ທ່ານ ຄຳເພົາ ພອນແກ້ວ

ອອກແບບປົ້ມ ແລະ ໜ້າປົກ : ທ່ານ ບຸນສອນ ຄຳມະນີວົງ

ຮັບຜິດຊອບ ຈັດພິມ ແລະ ກວດແກ້ : ທ່ານ ບຸນສອນ ຄຳມະນີວົງ

: ທ່ານ ພົງສະຫວັນ ສີລິພັນ

: ທ່ານ ສາຍສະໝອນ ສະຫລັບແສງ

ພິມເນື້ອໃນ ແລະ ຈັດໜ້າ : ນ. ແພງວັນ ໄຊຍະເພັນ

: ທ. ພອນປະເສີດ ນັນທະວົງ

: ນ. ເວັນຄຳ ດວງບຸດດີ

: ນ. ພູວົງ ສຸວັນນະວົງ

ພິມຄັ້ງທີ	1	ປີ	2010
ພິມຈຳນວນ			30 000 ຫົວ

ສະຫງວນລິຂະສິດ ນະຄອນຫລວງວຽງຈັນ

ພິມທີ່ໂຮງພິມນະຄອນຫລວງວຽງຈັນ

ສາລະບານ

1. ຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ..... XI
2. ຄຳເຫັນ ຂອງທ່ານ ສົມສະຫວາດ ເລັ່ງສະຫວັດ XVII
3. ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງ ແລະ ແບ່ງປັນງານ ຂອງອະນຸກຳມະການກະກຽມຈັດງານສະເຫຼີມສະຫຼອງ ວັນວຽງຈັນ ເປັນນະຄອນຫຼວງ ຄົບຮອບ 450 ປີ.. XXVII
4. ບົດຄຳເຫັນ ຂອງທ່ານ ສົມບັດ ເຢຍລີເຮີ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງນະຄອນຫລວງວຽງຈັນ ຕໍ່ປະຫວັດສາດ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ XXIX
5. ຄຳນຳ XXXIII
6. **ພາກສະເໜີ**.....XXXIX
7. **ທີ່ຕັ້ງ, ພູມີປະເທດ ແລະ ດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ ຂອງນະຄອນຫລວງວຽງຈັນໃນປະຈຸບັນ**..... XXXIX
8. I. **ທີ່ຕັ້ງ, ພູມີປະເທດ ແລະ ປະຊາກອນ ນະຄອນຫລວງວຽງຈັນ**..... XXXIX
9. 1. ທີ່ຕັ້ງ ພູມສັນຖານ ນະຄອນຫລວງວຽງຈັນ XXXIX
10. 2. ການປົກຄອງ ແລະ ພົນລະເມືອງນະຄອນຫລວງວຽງຈັນ XLIII
11. 3. ປະຊາຊົນບັນດາເຜົ່າ ໃນນະຄອນຫລວງວຽງຈັນ XXXIX
12. II. ສະພາບດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ ນະຄອນຫລວງວຽງຈັນ XLV
13. **ພາກທີໜຶ່ງ**.....3
14. ປະຫວັດສາດ ປະເທດລາວ ໂດຍຫຍໍ້ ແລະ ຄວາມເປັນມາຂອງຊື່ສຽງເມືອງວຽງຈັນ 3
15. I. ປະຫວັດສາດ ຂອງເມືອງວຽງຈັນ ກ່ອນປີ 1560..... 5
16. 1. ປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປະຈຸບັນ ຫລື ປະເທດລາວລ້ານຊ້າງ ໃນເມື່ອກ່ອນ 5
17. 2. ປະຫວັດສາດ ຄວາມເປັນມາຂອງ ເມືອງວຽງຈັນ ໃນສະໄໝອານາຈັກ ສີໂຄດຕະບອງ 16

18. 3. ເມືອງວຽງຈັນ ສະໄໝອານາຈັກ ລາວລ້ານຊ້າງ ກ່ອນປີ 1560..... 23
19. • ເມືອງວຽງຈັນ ໃນສະໄໝ ເຈົ້າ ຟ້າງຸ່ມ ທ້ອນໂຮມລາວເປັນເອກະພາບ..... 29
20. • ເມືອງວຽງຈັນ ໃນລັດຊະການ ພະຍາ ສາມແສນໄທໄຕພູວະນາດ
(ປີ 1374 - 1417)..... 34
21. • ເມືອງ ວຽງຈັນ ໃນລັດຊະການ ເຈົ້າ ໄຊຍະຈັກກະພັດແຜ່ນແຜ້ວ 34
22. • ເມືອງວຽງຈັນ ໃນລັດຊະການ ເຈົ້າ ໂພທິສາລາດ ປີ 1520 - 1550 35
ດ້ານເສດຖະກິດ - ສັງຄົມ ຂອງເມືອງວຽງຈັນ 36
23. **II. ເມືອງວຽງຈັນ ຖືກສະຖາປະນາເປັນ ນະຄອນຫລວງ ແຫ່ງຣາຊະອານາຈັກລາວ ລ້ານຊ້າງ**..... 38
24. 1. ເງື່ອນໄຂຍຸດທະສາດ ສຳຄັນທີ່ພາໃຫ້ ເຈົ້າ ໄຊເຊດຖາທິລາດ ຕົກລົງຕັ້ງ ວຽງຈັນ ເປັນນະຄອນຫຼວງ..... 38
25. 2. ນະຄອນຫຼວງວຽງຈັນ ຫລື ນະຄອນຈັນທະບູລີ ສີສັດຕະນາຄະນະຫຼວ ພາຍໃຕ້ ລາຊະການ ເຈົ້າໄຊເຊດຖາທິລາດ..... 40
26. 3. ນະຄອນຫຼວງວຽງຈັນ ຖືກພະມ້າ ຄຸກຄາມຢ່າງໜັກ ເຖິງ 3 ຄັ້ງ 45
27. 4. ນະຄອນຫລວງວຽງຈັນ ຕົກເປັນຫົວເມືອງສ່ວຍຂອງພະມ້າ
(ປີ 1574 - 1580) 46
28. 5. ເຈົ້າ ວໍລະວົງສາ ທຳມິກະລາດ ປະກາດອິດສະຫລະພາບ ຈາກພະມ້າ 49
29. **III. ນະຄອນຫລວງວຽງຈັນ ຮຸ່ງເຮືອງໃນສະໄໝ ເຈົ້າ ສຸລິຍະວົງສາ ທຳມິກະລາດ**
(ແຕ່ປີ 1638 ເຖິງປີ 1695)..... 50
30. 1. ບາງບັນທຶກ ຂອງຊາວຕາເວັນຕົກ ທີ່ໄດ້ມາພົບເຫັນ 50
31. 2. ທີ່ຕັ້ງ ພູມີສາດ ຂອງນະຄອນຫລວງວຽງຈັນ 52
32. 1. ທີ່ຕັ້ງ 52
33. 2. ກຳແພງເມືອງ 54
34. 3. ຄວາມຈະເລີນຮຸ່ງເຮືອງ ດ້ານສາສະໜາ ແລະ ຄວາມເຊື່ອຖື 66
35. - ວັດວາອາຮາມ 66
36. - ເຄຫາສະຖານ 71
37. - ພະຣາຊະວັງ 71
38. - ເຂດຊຸມນາງຜູ້ໃຫຍ່. (ຂ້າຣາຊະການຊັ້ນຜູ້ໃຫຍ່) 73
39. - ເຂດການຄ້າ 75

40. - ເຂດປະຊາຊົນ ອາໄສຢູ່ 75
41. - ຖະໜົນຫົນທາງ 77
42. - ເຂດຫັດຖະກຳ ດົນເຜົ່າ..... 82
43. 4. ສັງຄົມ ວັດທະນະທຳ ໃນສະໄໝ ເຈົ້າ ສຸລິຍະວົງສາ ທຳມິກະລາດ 82
44. 5. ສິລະປະ ວັນນະຄະດີ ລາວລ້ານຊ້າງ ຂະຫຍາຍຕົວ 84
45. **ພາກທີສອງ**.....103
46. **ນະຄອນຫລວງວຽງຈັນ ໃຕ້ການຢຶດຄອງ ຂອງສັກດິນາສະຫຍາມ (ໄລຍະປີ 1779 ເຖິງປີ 1893)** 103
47. **I. ສະພາບແວດລ້ອມ ກ່ອນສັກດິນາສະຫຍາມ ຕີເອົາຢຶດເອົາ ນະຄອນຫລວງ ວຽງຈັນ**..... 105
48. 1. ສັກດິນາສະຫຍາມ ຂະຫຍາຍອານາເຂດ..... 106
49. 2. ອານາຈັກລາວລ້ານຊ້າງ ຖືກແຍກ ອອກເປັນ 3 ແຄວ້ນ 107
50 3. ຄວາມອິດສາເຊິ່ງກັນ ແລະ ກັນ ໃນວົງກະສັດລາວດ້ວຍກັນ ຍ້ອນການ ຍຸແຍ່ພາຍນອກ 107
51. **II. ການປະຕິບັດກົນອຸບາຍຮຸກຮານ ແລະ ປຸ້ນສະດົມ ໂດຍສັກດິນາສະຫຍາມ ຕໍ່ອານາຈັກລາວລ້ານຊ້າງວຽງຈັນ** 107
52. 1. ການບຸກ (ໂຈມຕີ) ປຸ້ນສະດົມ ວຽງຈັນ ໂດຍສັກດິນາສະຫຍາມ 108
53. 2. ການກົດຂີ່ຂູດຮີດ ຂອງສັກດິນາສະຫຍາມ ຕໍ່ປະຊາຊົນລາວ, ເປັນຕົ້ນແມ່ນຕໍ່ ຊາວນະຄອນຫລວງວຽງຈັນ 110
54. 2.1. ການເສຍສ່ວຍສາອາກອນ 110
55. 2.2. ການຜູກຂາດກ່ຽວກັບສິນຄ້າສົ່ງອອກ 111
56. 2.3. ການເກັບສ່ວຍສາອາກອນ ກ່ຽວກັບດ້ານແຮງງານຄົນ 113
57. 2.4. ເລ່ກົນແບ່ງແຍກ ແລະ ການສວຍໃຊ້ກອງທັບສັກດິນາລາວ 113
58. **III. ລະບົບການຈັດຕັ້ງປົກຄອງລາວ ຂອງສັກດິນາສະຫຍາມ** 115
59. 1. ການຈັດຕັ້ງປົກຄອງລາວໄລຍະທີ 1 ປີ 1779 - 1829 115
60. 2. ການຈັດຕັ້ງປົກຄອງລາວ ໄລຍະທີ 2 ປີ 1829 - 1893. 116

61. **IV. ການຕໍ່ສູ້ ຕ້ານກັບກອງທັບສັກດິນາສະຫຍາມ ຂອງຊາວນະຄອນຫລວງ ວຽງຈັນ ພາຍໃຕ້ການນຳພາ ຂອງກະສັດລາວລ້ານຊ້າງ ວຽງຈັນ (ແຕ່ປີ 1779 - 1829)** 120

62. 1. ການຕໍ່ສູ້ປ້ອງກັນ ນະຄອນຫລວງວຽງຈັນ ນຳໂດຍ ເຈົ້າ ສິລິບຸນຍະສານ ແລະ ເຈົ້າ ນັນທະເສນ ປີ 1778 -1779. 121

63. 2. ຂະບວນການຕໍ່ສູ້ຂອງຊາວ ນະຄອນຫລວງວຽງຈັນ ພາຍໃຕ້ການນຳພາຂອງ ເຈົ້າ ນັນທະເສນ ເພື່ອຍາດເອົາຄວາມເປັນເອກະລາດ ປີ 1782 - 1794 122

64. 3. ຂະບວນການຕໍ່ສູ້ ຂອງຊາວອານາຈັກ ລ້ານຊ້າງວຽງຈັນ ຕ້ານກັບສັກດິນາ ສະຫຍາມ ພາຍໃຕ້ການນຳພາຂອງ ເຈົ້າ ອະນຸວົງ ປີ 1804 - 1829 127

65. - ການບູລະນະ ສ້າງສາ ປະເທດຊາດ ແລະ ກຽມເງື່ອນໄຂ ເພື່ອຕໍ່ສູ້ ກູ້ເອກະລາດ..... 127

66. - ການຕໍ່ສູ້ ຂອງອານາຈັກລາວລ້ານຊ້າງ ຕ້ານກອງທັບສະຫຍາມ 142

67. - ສັກດິນາສະຫຍາມ ຈັດກອງທັບເຂົ້າບຸກຕີ ກອງທັບລາວ 148

68. - ກອງທັບສະຫຍາມ ເຂົ້າບຸກຕີເມືອງວຽງຈັນ 169

69. - ກອງທັບສະຫຍາມ ທຳລາຍຕົວເມືອງວຽງຈັນ 178

70. **V. ຄວາມໝາຍປະຫວັດສາດ**..... 179

71. ສາເຫດ ທີ່ພາໃຫ້ຂະບວນການລຸກຮື້ຂຶ້ນຕໍ່ສູ້ ຂອງປະຊາຊົນລາວ ກໍ່ຄືຊາວ ນະຄອນຫລວງວຽງຈັນ ບໍ່ໄດ້ຮັບໄຊຊະນະ ນັ້ນມີຄື 179

72. **ພາກທີສາມ**.....191

73. **ນະຄອນຫລວງວຽງຈັນ ພ້ອມກັບ ປະຊາຊົນລາວ ຝັ່ງຊ້າຍ ຂອງແມ່ນ້ຳຂອງ ຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ ແຕ່ (ປີ 1893 - 1954)**..... 191

74. **I. ສະພາບການສາກົນ ແລະ ອາຊີອາຄະເນ ໃນສະຕະວັດທີ XIX (ປີ 1800 - 1900)** 193

75. 1. ການປະຕິວັດທຶນນິຍົມ ເລີ່ມກໍ່ຕົວຂຶ້ນ ໃນທົ່ວ ຢູລົບ ຕາເວັນຕົກ (ປີ 1789 - 1848) 193

76. 2. ການຂະຫຍາຍຕົວ ຂອງເສດຖະກິດນາຍທຶນ (ປີ 1848 - 1900) 193

77. 3. ໃນໄລຍະທ້າຍສະຕະວັດທີ XIX ນັ້ນ ຈັກກະພັດຝຣັ່ງ ແລະ ອັງກິດ ເປັນຄູ່ແຂ່ງ ຂັນກັນ ທີ່ລ້ຳໜ້າໃນການຮຸກຮານ ຍຶດເອົາປະເທດຕ່າງໆ ໃນໂລກ. ໂດຍສະເພາະ ຢູ່

ອາຊີອາຄະເນ ເປັນເຂດອຸດົມສົມບູນຮັ່ງມີ ດ້ວຍຊັບໃນດິນສິນໃນນ້ຳ 194

78. **II. ການປະຕິບັດ ລັດທິລ່າເມືອງຂຶ້ນ ແບບເກົ່າ ຂອງຈັກກະພັດຝຣັ່ງ ໃນທົ່ວ ປະເທດ ລາວລ້ານຊ້າງ, ລວມທັງຢຶດເອົາ ນະຄອນຫລວງວຽງຈັນ ເປັນເມືອງ ເອກຂອງຣາຊະອານາຈັກລາວ (ປີ 1893 -1945)** 197

79. 1. ລະບົບການຈັດຕັ້ງ, ການປົກຄອງ ແບບລ່າເມືອງຂຶ້ນຂອງຝຣັ່ງຢູ່ອິນດູຈີນ, ຝຣັ່ງ ເສດ ແລະ ຢູ່ລາວ..... 198

80. 2. ລະບົບການຈັດຕັ້ງ ຂ້າຣາຊະການຄົນພື້ນເມືອງຢູ່ ນະຄອນຫລວງວຽງຈັນ..... 203

81. 3. ລະບົບການຈັດຕັ້ງ ທີ່ເປັນເຄື່ອງມືປາບປາມ ຊາວນະຄອນຫລວງວຽງຈັນ..... 206

82. 4. ຜົນສະທ້ອນ ຂອງນະໂຍບາຍລັດທິລ່າເມືອງຂຶ້ນ ແບບເກົ່າ ຕໍ່ຊາວນະ ຄອນຫລວງ..... 208

83. **III. ຊາວນະຄອນຫລວງວຽງຈັນ ຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນ ແບບເກົ່າ ຂອງຈັກກະພັດຝຣັ່ງ**..... 211

84. 1. ຂະບວນການຕໍ່ສູ້ ໃນໄລຍະບໍ່ທັນມີພັກນຳພາ ແຕ່ປີ 1893 - 1929..... 211

85. 2. ຂະບວນການຕໍ່ສູ້ ໄລຍະມີພັກ ກອມມູນິດ ອິນດູຈີນ ນຳພາແຕ່ ປີ 1930 - 1945 213

86. **IV. ການຕໍ່ສູ້ ຕ້ານການຄືນມາຮຸກຮານລາວ ອີກຄັ້ງໃໝ່ ຂອງຈັກກະພັດຝຣັ່ງ ແຕ່ປີ 1946 - 1954**..... 218

87. 1. ສະພາບການກັບຄືນມາຮຸກຮານລາວ ອີກຄັ້ງໃໝ່ ຂອງຈັກກະພັດຝຣັ່ງ..... 218

88. 2. ຈັກກະພັດຝຣັ່ງ ຟື້ນຟູແອກລ່າເມືອງຂຶ້ນຢູ່ລາວ..... 221

89. 3. ການກໍ່ສ້າງ ແລະ ຂະຫຍາຍການຈັດຕັ້ງຮາກຖານພັກ ແລະ ການນຳພາຕໍ່ສູ້ ທາງດ້ານການເມືອງ 222

90. 4. ການກໍ່ສ້າງ ແລະ ນຳພາກຳລັງປະກອບອາວຸດຕໍ່ຕ້ານຝຣັ່ງ..... 225

91. 5. ກົນອຸບາຍໃໝ່ຂອງຈັກກະພັດຝຣັ່ງ ເພື່ອດັບມອດກຳລັງປະຕິວັດຢູ່ລາວ..... 229

92. 6. ການຕໍ່ສູ້ຕີເອົາຊະນະ ຈັກກະພັດຝຣັ່ງ ຂັ້ນສຸດທ້າຍ ປີ 1950 - 1954..... 230

93. 7. ສະພາບການຂົ້ນເຕົ້າໂຮມສອງແຂວງ..... 237

94. **ພາກທີ ສີ່**.....241

95. **ຊາວນະຄອນຫລວງວຽງຈັນ ພ້ອມກັບປະຊາຊົນລາວ ທົ່ວປະເທດ ຕໍ່ສູ້ຕ້ານກັບ ລັດທິລ່າເມືອງ ຂຶ້ນແບບໃໝ່ ຂອງຈັກກະພັດ ອາເມລິກາ ແລະ ລັດຖະບານຫຸ່ນ ຂາຍຊາດ ແຕ່ປີ 1954 -1975** 241

96. **I. ສະພາບການເຂົ້າມາຮຸກຮານລາວ ແລະ ນະຄອນຫລວງວຽງຈັນ ຂອງຈັກກະ ພັດອາເມລິກາ** 243

97. **II. ການປະຕິບັດກົນອຸບາຍ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກກະພັດ ອາເມລິກາ ໃນລາວ ແລະ ນະຄອນຫລວງວຽງຈັນ**..... 245

98. **III. ຊາວນະຄອນຫລວງວຽງຈັນ ຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກ ກະພັດອາເມລິກາ ແລະ ລັດຖະບານຫຸ່ນຂາຍຊາດ ໃນແຕ່ລະໄລຍະ**..... 247

99. 1. ໄລຍະການຕໍ່ສູ້ປະຕິບັດສັນຍາເຊີແນວ ແຕ່ປີ 1954 -1958..... 247

100. 2. ໄລຍະການຫັນທິດຕໍ່ສູ້ ແລະ ຕີສົງຄາມ ພິເສດຂອງອາເມລິກາ ປີ 1959 - 1962 253

101. 3.ໄລຍະຕໍ່ສູ້ຕ້ານສົງຄາມພິເສດຂອງອາເມລິກາ ແລະ ສ້າງຕັ້ງຄະນະພັກແຂວງ ນະຄອນຫລວງວຽງຈັນ (ວຽງຈັນ ຕາເວັນຕົກ ແລະ ວຽງຈັນ ເວັນອອກ) ປີ 1963 - 1973..... 276

102. 4. ໄລຍະປະຕິບັດ ສັນຍາເຊີແນວ ແລະ ສັນຍາວຽງຈັນ ເຖິງການຢຶດອຳນາດ ແຕ່ປີ 1973 ເຖິງປີ 1975..... 290

103. **ພາກທີ ຫ້າ**..... 311

104. **ນະຄອນຫລວງວຽງຈັນ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ (ປີ 1976 - 2010)** 311

105. **I. ການປົກປັກຮັກສາລະບອບໃໝ່ ແລະ ການດັດສ້າງ - ກໍ່ສ້າງສັງຄົມນິຍົມຢູ່ ນະຄອນຫລວງວຽງຈັນ ແຕ່ປີ 1976 - 1986** 313

106. ກ. ສະພາບແວດລ້ອມ ຢູ່ອິນດູຈີນ ຫລັງປີ 1975 313

107. ຂ. ການປັບປຸງ - ກໍ່ສ້າງລັດ ປະຊາທິປະໄຕ ປະຊາຊົນ, ຮຳບາດແຜສົງຄາມ ແລະ ຟື້ນຟູເສດຖະກິດ ແຕ່ປີ 1976 - 1981 ຢູ່ນະຄອນຫລວງວຽງຈັນ. 313

108. ຄ. ນະຄອນຫລວງວຽງຈັນ ໃນສະໄໝປະຕິບັດກົນໄກເສດຖະກິດ ເກົ້ອກຸນ (ປີ 1982 - 1986)..... 323
109. **II. ນະຄອນຫລວງວຽງຈັນ ໃນໄລຍະດຳເນີນ ພາລະກິດປ່ຽນແປງໃໝ່ຮອບດ້ານ ຢ່າງມີຫລັກການຂອງພັກ, ແຕ່ປີ 1986 - 2000** 349
110. ກ. ນະຄອນຫລວງວຽງຈັນ ດຳເນີນພາລະກິດປ່ຽນແປງໃໝ່ ແຕ່ປີ1986 -1990.. 349
111. ຂ. ກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ນະຄອນຫລວງວຽງຈັນ (31/ 3 - 2/4/ 1994) 355
111. 1. ຂົງເຂດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ..... 356
112. 2. ຂົງເຂດວຽກງານເສດຖະກິດ..... 336
113. 3. ການຄ້າ ແລະ ທ່ອງທ່ຽວ 357
114. 4. ການຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ 358
115. 5. ດ້ານການເງິນ, ທະນາຄານ 358
116. 6. ການພັດທະນາຊົນນະບົດ 358
117. 7. ການພົວພັນກັບຕ່າງປະເທດ 359
118. 8. ໃນຂົງເຂດ ວັດທະນະທຳ - ສັງຄົມ 359
118. 9. ຂົງເຂດລະບົບການເມືອງ 360
119. ຄ. ທິດທາງແຜນການພັດທະນາເສດຖະກິດ - ສັງຄົມ ໃນໄລຍະ ແຕ່ປີ 1996 - 2000 ຂອງນະຄອນຫລວງວຽງຈັນ 360
120. ງ. ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ III (27/12/1999) 363
121. 1. ກ່ຽວກັບຂົງເຂດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ 364
122. 2. ກ່ຽວກັບຂົງເຂດເສດຖະກິດ 367
123. 3. ຂົງເຂດ ວັດທະນະທຳ - ສັງຄົມ 369
124. 4. ຂົງເຂດລະບົບການເມືອງ, ການປົກຄອງ 373
125. **III. ການປະຕິບັດ ແຜນຍຸດທະສາດ ພັດທະນາເສດຖະກິດ - ສັງຄົມ ຂອງນະຄອນ ຫລວງວຽງຈັນ ແຕ່ປີ 2001 - 2010** 376
126. ກ. ຜົນການປະຕິບັດ ແຜນຍຸດທະສາດພັດທະນາເສດຖະກິດ - ສັງຄົມ ຂອງນະຄອນ ຫລວງວຽງຈັນ ໄລຍະປີ 2001 - 2005..... 379
127. ຂ. ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ IV

(19 - 21/8/2005) 384
128. ຄາດໝາຍສູ້ຊົນ ໄລຍະຮອດ ປີ 2020 399
129. ຄາດໝາຍສູ້ຊົນ ຮອດ ປີ 2015 402
130. ຄາດໝາຍສູ້ຊົນ ແຕ່ນີ້ຮອດປີ 2010 403
131. ໜ້າທີການເມືອງສຳຄັນ ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ສະໄໝທີ IV (ປີ 2005 - 2010) 404
132. ໃນໄລຍະແຕ່ປີ 2004 ເຖິງ 2009 ຢູ່ນະຄອນຫລວງວຽງຈັນ ໄດ້ມີເຫດການເດັ່ນ ລັກສະນະສາກົນຫລາຍເຫດການ ແຕ່ອັນສຳຄັນກວ່າໝູ່ແມ່ນ 3 ເຫດການ 407
133. ຕີລາຄາຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ (ປີ 2006 - 2010) 411
134. I. ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ 411
135. 1. ໄດ້ຍູ້ແຮງການພັດທະນາເສດຖະກິດ ບົນພື້ນຖານກົນໄກຕະຫລາດ ແລະ ຕາມ ທ່າອ່ຽງທັນເປັນອຸດສາຫະກຳ ແລະ ທັນສະໄໝ 411
136. 2. ການພັດທະນາຕາມເຂດແຄ້ມ 412
137. 3. ການພັດທະນາຕາມບັນດາຂົງເຂດ 412
138. ວຽກງານພັກ - ພະນັກງານ 416
139. ທິດທາງກໍ່ສ້າງພັກ - ພະນັກງານ 418
140. **II. ວິໄສທັດການພັດທະນານະຄອນຫລວງວຽງຈັນ** 418
141. 1. ວິໄສທັດການພັດທະນາ ແຕ່ນີ້ຮອດປີ 2030 418
142. 2. ວິໄສທັດການພັດທະນາ ແຕ່ນີ້ຮອດປີ 2020 419
143. 3. ວິໄສທັດການພັດທະນາ ນະຄອນຫລວງວຽງຈັນ ສະເພາະ (ປີ 2011 - 2015) 420
144. **ພາກສະຫລຸບ** 123
145. * **ເຫດການທີ່ສຳຄັນທາງ ປະຫວັດສາດຢູ່ນະຄອນຫລວງວຽງຈັນ** 430
146. * **ລາຊະວົງຕ່າງໆ ທີ່ປົກຄອງຢູ່ວຽງຈັນ** 434
147. ກ. ສຳລັບກະສັດ ທີ່ປົກຄອງອານາຈັກ ລ້ານຊ້າງ ຢູ່ວຽງຈັນ 434
148. ຂ. ກະສັດອານາຈັກລ້ານຊ້າງວຽງຈັນ (ຫລັງຈາກແບ່ງແຍກເປັນ 3 ອານາຈັກ).. 434

149. ຄ. ເຈົ້າຄອງ ນະຄອນຫລວງວຽງຈັນ ແຕ່ປະເທດຊາດ ໄດ້ຮັບການປົດປ່ອຍ ປີ1975 ເປັນຕົ້ນມາ 435
150. ງ. ນາຍົກລັດຖະມົນຕີ ຂອງລັດຖະບານລາວ ໃນໄລຍະລະບອບ ລາຊາທິປະໄຕ ແຫ່ງລາຊະອານາຈັກລາວ - ລະບອບສັກດິນາ, ຊຸນນາງ, ມີເຈົ້າຊຸນມຸນນາຍ ແລະ ລະບອບໃໝ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ, ລະບອບທີ່ກ້າວໜ້າກວ່າທຸກໆລະບອບກ່ອນ ຊຶ່ງປະຊາຊົນລາວ ບັນດາເຜົ່າ ໄດ້ເປັນເຈົ້າຂອງປະເທດຊາດຢ່າງສົມບູນ ຊຶ່ງຍາດມາໄດ້ ໃນວັນທີ 2 ທັນວາ ປີ 1975 ເຖິງ ປະຈຸບັນ ແລະ ຕໍ່ໆໄປໃນອານາຄົດ 435
151. * ນາຍົກລັດຖະມົນຕີຂອງລັດຖະບານຫຸ່ນວຽງຈັນ ໃນລາຊະອານາຈັກລາວ..... 435
152. * ນາຍົກລັດຖະມົນຕີ ຂອງລັດຖະບານລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 436
153. ບັນດາສະຫາຍທີ່ຖືກເລືອກຕັ້ງເປັນເລຂາຄະນະພັກ, ປະທານປົກຄອງເຈົ້າຄອງ ນະຄອນຫລວງວຽງຈັນແຕ່ລະສະໄໝ, ພາຍຫລັງຢຶດອຳນາດການປົກຄອງ, ສ້າງຕັ້ງລະບອບໃໝ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ປີ 1975 437
154. ຄຳເຫັນຂອງ ທ່ານ ສົມລະວິງ ຄຸດໄພທູນ ເຈົ້າຄອງ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ, ຂອງຄະນະພັກ, ຄະນະປົກຄອງ (ເຈົ້າຄອງ) ນະຄອນຫລວງ ວຽງຈັນ ແລະ ຄະນະຮັບຜິດຊອບ ສະເຫລີມສະຫລອງ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ 439
155. **I. ສຸມໃສ່ຈັດຕັ້ງປະຕິບັດ 21 ໂຄງການ** 439
156. **II.ພັດທະນານະຄອນຫລວງວຽງຈັນໃຫ້ນັບລຸຄາດໝາຍ 6ສ**..... 454
157. **III. ກຳນົດໝາຍ ແລະ ໂຄງການປະຕິບັດ 6 ສ** 456
158. ກ. ສ້າງເມືອງວຽງຈັນ ໃຫ້ເປັນເມືອງແຫ່ງຄວາມສະຫງົບສຸກ..... 456
159. ຂ. ສ້າງນະຄອນວຽງຈັນເປັນເມືອງສະອາດ(Clean City). 457
160. ຄ. ສ້າງນະຄອນວຽງຈັນ ເປັນເມືອງສີຂຽວ (Green City) 467
161. ງ. ສ້າງວຽງຈັນ ເປັນນະຄອນສະຫວ່າງ (Light City)..... 468
162. ຈ. ສ້າງເມືອງວຽງຈັນ ເປັນນະຄອນສະເໜ່ (Char ming City) 470
163. ສ. ສ້າງນະຄອນວຽງຈັນ ເປັນເມືອງສີວິໄລ (Civilised City)..... 472

24/7 ห้ามจำหน่าย

164. **IV. ຂັ້ນຕອນ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ** 473
165. 1. ຂັ້ນຕອນການປະຕິບັດ 473
166. 2. ມາດຕະການຈັດຕັ້ງປະຕິບັດ 6 ສ 474
167. ເອກະສານອ້າງອີງ ໃນການຊອກເກັບຂໍ້ມູນ ແລະ ເນື້ອໃນ ນຳມາຄົ້ນຄວ້າ ຂຽນປຶ້ມ ປະຫວັດສາດ ນະຄອນຫລວງວຽງຈັນ 450 ປີ 477

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ..78...../ນຍ
ນະຄອນຫລວງວຽງຈັນ, ວັນທີ.30.07.2007.

ຂໍ້ຕົກລົງ
ຂອງນາຍົກລັດຖະມົນຕີ
ວ່າດ້ວຍການສະເຫລີມສະຫລອງວັນວຽງຈັນ
ເປັນນະຄອນຫລວງ ຄົບຮອບ 450 ປີ

- ອີງຕາມມາດຕາ 12 ໝວດ IV ຂອງກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.

- ອີງຕາມການຕົກລົງຂອງກອງປະຊຸມນາຍົກ - ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 19 ເມສາ 2007.

- ອີງຕາມມະຕິຕົກລົງຂອງກອງປະຊຸມກົມການເມືອງສູນກາງພັກ ຊຶ່ງໄດ້ລະບຸໄວ້ໃນແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 352, ລົງວັນທີ 4 ກໍລະກົດ 2007.

- ອີງຕາມບົດລາຍງານ ສະບັບເລກທີ 13/ຈນວ, ລົງວັນທີ 17 ກໍລະກົດ 2007 ຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ.

ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 01: ໃຫ້ນະຄອນຫລວງວຽງຈັນ ຈັດຕັ້ງງານສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ຢ່າງເປັນທາງການ ໃນປີ 2010, ຊຶ່ງຈຸດປະສົງລະດັບຄາດໝາຍ ແລະ ເນື້ອໃນຕົ້ນຕໍຂອງການສະເຫລີມສະຫລອງວັນດັ່ງກ່າວແມ່ນ ສຶກສາອົບຮົມ ແລະ ປຸກລະດົມໃຫ້ຊາວນະຄອນຫລວງວຽງຈັນ ທຸກຊັ້ນຄົນ, ທຸກເພດໄວເຫັນໄດ້ມູນເຊື້ອອັນສະຫງ່າອົງອາດຂອງນະຄອນຫລວງວຽງຈັນ, ເສີມຂະ

ຫຍາຍນ້ຳໃຈຮັກຊາດ ຮັກລະບອບໃໝ່, ເພີ່ມທະວີຄວາມສາມັກຄີປອງດອງ, ຖືເອົາໂອກາດ 450 ປີ ເປັນການຂຸດຄົ້ນກຳລັງແຮງບົ່ມຊ້ອນພາຍໃນ ເພື່ອປະຕິບັດບັນດາຄາດໝາຍ ທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກວາງອອກ, ສ້າງມານະຈິດບຸກບືນ ສ້າງຄວາມກະຕືລືລົ້ນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາ ນະຄອນຫລວງວຽງຈັນ; ສ້າງ ນະຄອນຫລວງວຽງຈັນ ໃຫ້ສົມກຽດ ເປັນເມືອງໜວງຂອງ ສປປ ລາວ, ເປັນຕົວແທນຂອງ ປະຊາຊົນ ລາວບັນດາເຜົ່າ, ເປັນນະຄອນ ທີ່ມີພື້ນຖານ ເສດຖະກິດ ຂະຫຍາຍຕົວໄວ, ສັງຄົມມີຄວາມຍຸຕິທຳສີວິໄລ, ເປັນຕົວເມືອງ, ຜັງເມືອງ ແລະ ສາທາລະນະປະໂຫຍດ ມີຄວາມທັນສະໄໝຢ່າງ ບໍ່ຢຸດຢັ້ງ.

ມາດຕາ 02: **ແຕ່ງຕັ້ງ ຄະນະກຳມະການ ກະກຽມສະເຫລີມສະຫລອງວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ, ຊຶ່ງປະກອບດ້ວຍບັນດາທ່ານດັ່ງນີ້:**

1. ທ່ານ ສົມສະໜາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດ ຖະບານ **ເປັນປະທານ.**
2. ທ່ານ ສົມບັດ ເຢຍລີເຮີ, ເລຂາທິການສູນກາງພັກ, ເລຂາຄະນະພັກ ນະຄອນຫຼວງ ເປັນຮອງປະທານ ແລະ ເປັນຫົວໜ້າຄະນະປະຕິບັດງານ.
3. ທ່ານ ດຣ. ສົມລະວິງ ຄຸດໄພທູນ, ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ ເປັນຮອງປະທານ ແລະ ເປັນຜູ້ປະຈຳການ.
4. ທ່ານ ພົນຕີ ຈັນສະໝອນ ຈັນຍາລາດ, ກຳມະການສູນກາງພັກ, ລັດຖະມົນຕີ ຊ່ວຍວ່າການກະຊວງປ້ອງກັນປະເທດ **ເປັນຄະນະ.**
5. ພະມະຫາ ວິຈິດ ສິງຫາລາດ ປະທານສູນກາງ ອພສ **ເປັນຄະນະ.**
6. ທ່ານ ດວງດີ ອຸດທະຈັກ ຫົວໜ້າກຳມາທິການ ວັດທະນະທຳ - ສັງຄົມ ສະພາແຫ່ງຊາດ **ເປັນຄະນະ.**
7. ທ່ານ ສົມວັນດີ ນາຖາວົງ ຄະນະປະຈຳພັກ ຮອງເຈົ້າຄອງນະຄອນຫຼວງວຽງຈັນ **ເປັນຄະນະ.**
8. ທ່ານ ບຸນຈັນ ສົມທະວົງ ຄະນະປະຈຳພັກ ຮອງເຈົ້າຄອງນະຄອນຫຼວງວຽງຈັນ **ເປັນຄະນະ.**

9. ທ່ານ ທ້ຽມ ພົມມະຈັນ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ **ເປັນຄະນະ.**
10. ທ່ານ ດຣ.ແຂກແກ້ວ ຊ້ອຍໄຊຍະ, ຮອງຫົວໜ້າສະຖາບັນ ວິທະຍາສາດ - ສັງຄົມ ແຫ່ງຊາດ **ເປັນຄະນະ.**
11. ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ **ເປັນຄະນະ.**
12. ທ່ານ ບົວເງິນ ຊາພູວົງ, ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ - ວັດທະນະທຳ **ເປັນຄະນະ.**
13. ທ່ານ ດຣ. ໄຊຍະມັງ ວົງສັກ, ຮອງປະທານສູນກາງແນວລາວສ້າງຊາດ **ເປັນຄະນະ.**
14. ທ່ານ ດຣ. ສົມພະວັນ ອິນທະວົງ, ພະນັກງານບຳນານ ອະດີດລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ **ເປັນຄະນະ.**
15. ທ່ານ ເຊີນ ເພັດສັງທານ, ພະນັກງານບຳນານ ອະດີດລັດຖະມົນຕີ ຊ່ວຍວ່າການກະຊວງ ຄຂປກ **ເປັນຄະນະ.**
16. ທ່ານ ບົວບານ ວໍລະຊຸນ, ພະນັກງານບຳນານ ອະດີດລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ - ວັດທະນະທຳ **ເປັນຄະນະ.**
17. ທ່ານ ນາງ ເຂັມເພັດ ພົນເສນາ, ພະນັກງານບຳນານ ອະດີດຮອງປະທານສູນກາງສະຫະພັນແມ່ຍິງລາວ **ເປັນຄະນະ.**
18. ທ່ານ ບົວສີ ຈະເລີນສຸກ, ພະນັກງານບຳນານ ອະດີດຫົວໜ້າ ຫໍພິພິທະພັນໄກສອນ ພົມວິຫານ **ເປັນຄະນະ.**
19. ທ່ານ ດຣ. ຄຳຕັນ ຈັນທະລາ, ພະນັກງານບຳນານ ອະດີດລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ **ເປັນຄະນະ.**
20. ທ່ານ ທົມມະກອນ ມະໂນທັມ, ພະນັກງານບຳນານ ອະດີດລັດຖະມົນຕີຊ່ວຍວ່າການກະຊວງ ຄຂປກ **ເປັນຄະນະ.**
21. ທ່ານ ກິຄຳ ວົງໄຊ, ພະນັກງານບຳນານ ອະດີດລັດຖະມົນຕີຊ່ວຍວ່າການກະຊວງການເງິນ **ເປັນຄະນະ.**
22. ທ່ານ ນາງ ດາຣາ ກັນລະຍາ, ພະນັກງານບຳນານ ອະດີດຄະນະປະຈຳສູນກາງແນວລາວສ້າງຊາດ **ເປັນຄະນະ.**

23. ທ່ານ ຄຳເພົາ ພອນແກ້ວ, ພະນັກງານບຳນານ ອະດີດເລຂາທິການຄະນະກຳມະການແຫ່ງຊາດລາວ ເພື່ອອຸຍແນັດສະໂກ **ເປັນຄະນະ.**
24. ທ່ານ ພູລາດຊະພົນ, ພະນັກງານບຳນານ ອະດີດເອກອັກຄະລັດຖະທູດລາວປະຈຳປະເທດ ສະວີເດັນ **ເປັນຄະນະ.**
25. ທ່ານ ລຳໄມ ພິພັກຂະວົງ, ຮອງອະທິການບໍດີມະຫາວິໄລແຫ່ງຊາດ **ເປັນຄະນະ.**
26. ທ່ານ ພົນຈັດຕະວາ ວິໄລ ດວງມະນີ ຜູ້ອຳນວຍການວິທະຍາຄານ ວປສ ແຫ່ງຊາດ **ເປັນຄະນະ.**
27. ທ່ານ ດຣ. ທອງຄຳ ອ່ອນມະນີສອນ, ພະນັກງານບຳນານ ອະດີດຫົວໜ້າກົມວັດທະນະທຳມະຫາຊົນ **ເປັນຄະນະ.**
28. ທ່ານ ນາງ ຍອດແກ້ວມະນີ ສຸພານຸວົງ, ຮອງຫົວໜ້າຫ້ອງວ່າການສູນກາງພັກ **ເປັນຄະນະ.**
29. ທ່ານ ກິດສະໜາ ວົງໄຊ, ອຳນວຍການບໍລິສັດເບຍລາວ **ເປັນຄະນະ.**
30. ທ່ານ ວິລະຈິດ ພິລາພັນເດດ, ຫົວໜ້າບໍລິສັດລາວໂຕໂຍຕາ, ຮອງປະທານມູນນິທິສົ່ງເສີມການສຶກສາ **ເປັນຄະນະ.**
31. ທ່ານ ວິສິດ ໄຊຍະທິດ, ອຳນວຍການໂຮງງານເຫລັກເສັ້ນລາວ **ເປັນຄະນະ.**

ມາດຕາ 03: ຄະນະກຳມະການ ດັ່ງກ່າວມີສິດ ແລະ ໜ້າທີ່ຕົ້ນຕໍ ຄື:

- ສ້າງແຜນການ, ກຳນົດລາຍການໂຄງການ ແລະ ກິດຈະກຳຂອງການເຄື່ອນໄຫວສະເຫຼີມສະຫຼອງວຽງຈັນ ຄົບຮອບ 450 ປີ ໃນປີ 2010.
- ຄົ້ນຄວ້າ, ຮຽບຮຽງ ແລະ ນຳສະເໜີ ລັດຖະບານ ພິຈາລະນາກ່ຽວກັບປະຫວັດສາດ ຄວາມເປັນມາຂອງຕົວເມືອງວຽງຈັນ ໃນສະໄໝບູຮານ ມາເຖິງປະຈຸບັນ.
- ຄົ້ນຄວ້ານຳສະເໜີແຜນຜັງເມືອງວຽງຈັນ ສະບັບໃໝ່ ເພື່ອລາຍງານລັດຖະບານ ແລະ ສະພາແຫ່ງຊາດ ຕົກລົງຕາມລະບຽບການ.
- ປຸກລະດົມຂົນຂວາຍພະນັກງານ, ລັດຖະກອນ, ປະຊາຊົນລາວທຸກຊັ້ນຄົນທຸກເພດໄວນັບທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າຮ່ວມຂະບວນການ ສ້າງສານະຄອນຫລວງວຽງຈັນ ໄລຍະໃໝ່ ສ້າງຂະບວນການຮອບດ້ານ ເພື່ອສະເຫຼີມສະຫຼອງ ວັນວຽງຈັນ ເປັນ ນະຄອນຫຼວງ ຄົບຮອບ 450 ປີ ໃນປີ 2010 ໃຫ້ສົມກຽດ.
- ຄົ້ນຄວ້າຊອກຫາແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດໂຄງການກິດຈະການ ທີ່ກ່ຽວຂ້ອງ ກັບການ ສະເຫຼີມສະຫຼອງ ວຽງຈັນ 450 ປີ.

- ຂົນຂວາຍແນະນຳບັນດາກະຊວງ, ອົງການສູນກາງ, ແຂວງ ແລະ ນະຄອນຫຼວງ ເພື່ອເຂົ້າຮ່ວມ ແລະ ສະເຫຼີມສະຫຼອງງານ ວຽງຈັນ 450 ປີ ໃຫ້ເປັນຂະບວນການ ຄຶກຄື້ນ, ເປັນປາງບຸນລວມຂອງຊາດ.
- ປະສານງານກັບພາກສ່ວນຕ່າງໆ ທີ່ເຫັນຈຳເປັນ.
- ມີສິດໜ້າທີ່ອື່ນໆ ຕາມການຊີ້ນຳຂອງລັດຖະບານ, ສະພາແຫ່ງຊາດ ແລະ ກົມການເມືອງສູນກາງພັກ.

ມາດຕາ 04: ມອບໃຫ້ ຄະນະກຳມະການ ດັ່ງກ່າວ ເຜີຍແຜ່ຜັນຂະຫຍາຍເນື້ອໃນຈິດໃຈ, ຈຸດປະສົງ, ຄາດໝາຍ, ເນື້ອໃນ ແລະ ການຈັດຕັ້ງເຄື່ອນໄຫວຂອງງານ ດັ່ງກ່າວ ໂດຍໃຫ້ເລີ່ມຕົ້ນເຄື່ອນໄຫວ ນັບແຕ່ໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ໃຫ້ປະຊາຊົນທຸກຊັ້ນ ຄົນຮັບຮູ້ເຂົ້າໃຈ ແລະ ເຂົ້າຮ່ວມຢ່າງກວ້າງຂວາງ.

ມາດຕາ 05: ມອບໃຫ້ປະທານ ຄະນະກຳມະການ ດັ່ງກ່າວ ແຕ່ງຕັ້ງບັນດາ ອະນຸກຳມະການ ເພື່ອຮັບຜິດຊອບວຽກງານຕ່າງໆ, ກຳນົດສິດ, ໜ້າທີ່ ແລະ ແບ່ງງານໃຫ້ບັນດາທ່ານ ທີ່ຖືກແຕ່ງຕັ້ງຮັບຜິດຊອບ ຢ່າງລະອຽດຈະແຈ້ງ.

ມາດຕາ 06: ສຳລັບງົບປະມານ ທີ່ຈຳເປັນຂອງຄະນະ ດັ່ງກ່າວ ແມ່ນໃຫ້ຈັດເຂົ້າໃນແຜນງົບປະມານ ບໍລິຫານ ແຕ່ລະປີ ຂອງຫ້ອງວ່າການ ນະຄອນຫລວງວຽງຈັນ.

ມາດຕາ 07: ບັນດາກະຊວງ, ອົງການອ້ອມຂ້າງລັດຖະບານ, ຄະນະຮັບຜິດຊອບຈັດງານສະເຫຼີມສະຫຼອງ, ຄະນະພັກ - ອົງການປົກຄອງນະຄອນຫຼວງວຽງຈັນ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 08: ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝັ້ນຍືນ ! ! !

ຄຳເຫັນ



ຂອງທ່ານ ສົມສະຫວາດ ເລັ່ງສະຫວັດ ກຳມະການ ກົມການເມືອງສູນກາງພັກ ປະຊາຊົນ ປະຕິວັດລາວ, ຮອງນາ ຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ, ປະທານຄະນະ ກຳມະການຈັດງານສະເຫລີມສະຫລອງ ນະຄອນຫລວງ ວຽງ ຈັນ ຄົບຮອບ 450 ປີ

ບັນດາສະຫາຍ ແລະ ເພື່ອນມິດທີ່ຮັກແພງ !

ພີ່ນ້ອງຊາວນະຄອນຫຼວງວຽງຈັນ ພ້ອມດ້ວຍພີ່ນ້ອງ ຮ່ວມຊາດບັນດາເຜົ່າທັງຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ທີ່ຮັກແພງທັງຫຼາຍ !

ເປັນຫຍັງ ຫຼື ດ້ວຍສາເຫດອັນໃດກົມການເມືອງສູນກາງພັກ, ລັດຖະບານ ແລະ ຄະນະ ພັກ ນະຄອນຫຼວງ ຈຶ່ງຕົກລົງໃຫ້ຈັດງານ ສະເຫລີມສະຫລອງ ວຽງຈັນ ເປັນ ນະຄອນຫລວງ ຄົບ ຮອບ 450 ປີ ?

ດັ່ງທີ່ພວກເຮົາໄດ້ຮັບຮູ້ນຳກັນແລ້ວວ່າ ວຽງຈັນ ເປັນເມືອງໜຶ່ງ ທີ່ມີປະຫວັດສາດ ອັນເກົ່າ ແກ່ຂອງປະເທດລາວເຮົາ ແລະ ຂອງພາກພື້ນອາຊີອາຄະເນ. ຖ້າເວົ້າຕາມຄວາມເຊື່ອຂອງຄົນ ລາວທົ່ວໄປແລ້ວ ເມືອງວຽງຈັນ ອາດມີອາຍຸເປັນ 2.000 ກວ່າປີ ແລ້ວ, ໂດຍເລີ່ມຈາກເປັນບ້ານ ນ້ອຍ, ຈົນກາຍເປັນເມືອງ ແລະ ເປັນນະຄອນ. ການໃຫ້ຊື່ວ່າ " ວຽງຈັນ " ແມ່ນເຊື່ອກັນວ່າເປັນ ຊື່ຂອງຜູ້ມາສ້າງເມືອງ ຄົນທຳອິດ ມີຊື່ວ່າ ທ້າວ ບູລີຈັນ ໃນລະຫວ່າງ ປີ 236 ກ່ອນຄ.ສ. ຈົນມາ ເຖິງປີ 1560, ເມືອງວຽງຈັນ ຈຶ່ງຖືກສະຖາປະນາໄປເປັນ ນະຄອນຫຼວງ ຂອງປະເທດລາວລ້ານ ຊ້າງ, ໂດຍແມ່ນ ເຈົ້າ ໄຊເຊດຖາທິລາດ, ເຈົ້າແຜ່ນດິນຜູ້ນຳພາສ້າງພະທາດຫລວງ.

ນັບແຕ່ນັ້ນມາ ນະຄອນຫລວງວຽງຈັນ ກໍ່ໄດ້ຮັບການພັດທະນາ ສືບຕໍ່ມາເປັນໄລຍະໆ ຊຶ່ງມີທັງໄລຍະຈະເລີນຮຸ່ງເຮືອງ ອັນເປັນທີ່ຍົກຍ້ອງ ຂອງແຂກຕ່າງດ້າວ ທ້າວຕ່າງແດນ ມີທັງໄລ ຍະມືດມົນ, ຂົມຂື່ນ ຍ້ອນຖືກທຳລາຍ ເຜົາຜານ ແລ້ວຕົກເປັນຫົວເມືອງສ່ວຍ ຂອງສັກດິນາສະ ຫຍາມ ແລະ ເປັນຫົວເມືອງຂຶ້ນ ຂອງພວກຈັກກະພັດຕ່າງດ້າວ, ເປັນເວລາທັງໝົດເກືອບ 200 ປີ, ແຕ່ ປະຊາຊົນ ບັນດາເຜົ່າ ພວກເຮົາ, ບໍ່ວ່າຈະຢູ່ພາກເໜືອ, ພາກກາງ ຫຼື ພາກໃຕ້ ກໍ່ຄືພີ່ ນ້ອງຊາວລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ລ້ວນແຕ່ມີຄວາມເອກອ້າງທະນົງໃຈ ເມື່ອເຫັນວ່າ ພາຍໃຕ້ລະບອບ ປະຊາທິປະໄຕ ປະຊາຊົນ ເປັນຕົ້ນມາ ໄດ້ມີການຂະຫຍາຍຕົວ ໄປໃນທິດ ທາງທີ່ກ້າວໜ້າ ແລະ ທັນສະໄໝ, ປະຊາຊົນນັບມື້ນັບຢູ່ດີມີສຸກ ຊຶ່ງບໍ່ມີໄລຍະປະຫວັດສາດໃດ ສາມາດມາປຽບທຽບໄດ້.



ຫໍຄຳ ທຳນຽບປະທານປະເທດ ສູນກາງການປົກຄອງ ສ.ປ.ປ ລາວ
ທນະຄອນຫລວງວຽງຈັນ

ດັ່ງນັ້ນ, ການຈັດງານສະເຫຼີມສະຫຼອງ ວັນວຽງຈັນ ເປັນ ນະຄອນຫຼວງ ຄົບຮອບ 450 ປີ ນີ້ ຈຶ່ງແມ່ໃສ່ເຮັດໃຫ້ ປະຊາຊົນເຮົາ ທົບທວນຄືນຢ່າງຖີ່ຖ້ວນຖືກຕ້ອງ ເຖິງ ປະຫວັດສາດ ຄວາມເປັນມາຂອງ ນະຄອນຫຼວງວຽງຈັນ, ເຮັດໃຫ້ພວກເຮົາເຫັນຢ່າງຈະແຈ້ງວ່າ: ການອຸທິດຕົນຕໍ່ຄວາມຮັບຜິດຊອບ, ການສ້າງຄຸນງາມຄວາມດີ ຂອງບັນພະບູລຸດ ແລະ ປະຊາຊົນ ລາວບັນດາເຜົ່າ ກໍ່ຄືຊາວ ນະຄອນກຫລວງວຽງຈັນ ຮຸ່ນຕ່າງໆ ແມ່ນໃຫຍ່ຫລວງ, ປະເສີດເລີດລ້ຳ, ເປັນມູນເຊື້ອ ແລະ ມໍລະດົກອັນລ້ຳຄ່າ ຊຶ່ງພວກເຮົາຕ້ອງອອກແຮງສຶກສາຮຽນຮູ້, ຖອດຖອນເອົາເປັນບົດຮຽນ, ທັງປົກປັກຮັກສາເອົາໄວ້ໃຫ້ໝັ້ນຄົງ ແລະ ພັດທະນາເມືອງຫຼວງພວກເຮົາ ໃຫ້ກ້າວໜ້າໄປຢ່າງວ່ອງໄວໜັກແໜ້ນຖືກທິດ, ເຮັດໃຫ້ນະຄອນຫຼວງວຽງຈັນ ທັງເປັນສັນຍາລັກ, ເປັນສູນລວມນ້ຳໃຈຂອງຊາດ, ເປັນຕົວແທນຂອງປະຊາຊົນລາວບັນດາເຜົ່າ, ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄວາມຈະເລີນສີວິໄລຂອງປະເທດຊາດ ທີ່ແສນຮັກຂອງພວກເຮົາ. ສາມາດເວົ້າໄດ້ວ່າ ການສະເຫຼີມສະຫຼອງວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ນັ້ນ ມັນບໍ່ແມ່ນອື່ນໃດ, ຫາກແມ່ນເພື່ອພ້ອມກັນເຫັນອະດີດໃຫ້ຖືກຕ້ອງ, ເຂົ້າໃຈສະພາວະຄວາມເປັນຈິງ ໃນປະຈຸບັນ ໃຫ້ເລິກຊຶ້ງຮອບດ້ານ ແລະ ພ້ອມກັນບຸກບືນສູ້ຊົນກ້າວ

ຂຶ້ນສ້າງ ນະຄອນຫລວງວຽງຈັນ ແຫ່ງລະບອບໃໝ່ ສູ່ອະນາຄົດອັນຮຸ່ງເຮືອງສົດໃສ ໃຫ້ເທົ່າທຽມກັບ ນະຄອນຫລວງ ຂອງບັນດາປະເທດເພື່ອນມິດໃນຂົງເຂດນີ້.



ສຳນັກງານນາຍົກລັດຖະມົນຕີແຫ່ງ ສ.ປ.ປ ລາວ ທີ່ນະຄອນຫລວງວຽງຈັນ

ການສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ມີຄວາມໝາຍສຳຄັນແນວໃດແດ່ ?

ພວກເຮົາທຸກຄົນຕ່າງກໍ່ຮູ້ແລ້ວວ່າ ຕະຫຼອດໄລຍະ 450 ປີ ທີ່ຜ່ານມາ, ປະຊາຊົນເຮົາບໍ່ເຄີຍໄດ້ ສະເຫຼີມສະຫຼອງ ວັນສ້າງຕັ້ງ ວຽງຈັນ ເປັນນະຄອນຫຼວງ ຈັກເທື່ອ, ຊຶ່ງເທື່ອນີ້ນັບວ່າເປັນຄັ້ງທຳອິດ, ດັ່ງນັ້ນ ການສະເຫຼີມສະຫຼອງ ຈຶ່ງມີຄວາມສຳຄັນທາງປະຫວັດສາດ, ການເມືອງ, ສັງຄົມ, ດ້ານຜັງເມືອງ ແລະ ມີຄວາມໝາຍສາກົນ ອີກດ້ວຍ. ຖ້າເວົ້າອີກຢ່າງໜຶ່ງ ການສະເຫຼີມສະຫຼອງນີ້; ເປັນການທົບທວນເຫດການສຳຄັນ, ຮຽນຮູ້ ປະຫວັດສາດ ຄວາມເປັນມາແຫ່ງການກໍ່ຮ່າງສ້າງຕົວຂອງ ນະຄອນຫຼວງວຽງຈັນ ນັບແຕ່ບູຮານມາເຖິງປະຈຸບັນ, ໂດຍຕິດພັນ ແລະ ບົ່ງບອກເຖິງການປະກອບສ້າງ ເປັນຊາດລາວ, ເປັນການສຶກສາຮຽນຮູ້ກຽດ ແລະ ສັກສີຂອງຄວາມເປັນລາວໃນປະຫວັດສາດ, ມູນເຊື້ອ ຂອງຄົນລາວ, ຄົນນະຄອນຫຼວງວຽງຈັນ ນັບທັງວິລະບູລຸດແຕ່ລະສະໄໝ ທີ່ໄດ້ຜ່ານຜ່າການຕໍ່ສູ້ ອັນອົງອາດກ້າແກ່ນ ແລະ ບໍ່ຍອມຈຳນົນ, ການເສີມຂະຫຍາຍສະຕິປັນຍາ ເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາ ແຜ່ນດິນວຽງຈັນ; ພ້ອມກັນນັ້ນ ການສະເຫຼີມສະຫຼອງວັນ ນະຄອນຫຼວງວຽງຈັນ ຄົບຮອບ 450 ປີ ຍັງເປັນການສ້າງຂະບວນການກະກຽມ ການດຳເນີນກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ນະຄອນຫລວງ, ກອງປະຊຸມ ໃຫຍ່ທົ່ວປະເທດ ຄັ້ງທີ IX ຂອງພັກ, ວັນຊາດ ຄົບຮອບ 35 ປີ, ວັນເກີດຂອງປະທານໄກສອນ ພົມວິຫານ ຄົບຮອບ 90 ປີ, ວັນເກີດຂອງປະທານ ສຸພານຸວົງ ຄົບຮອບ 100 ປີ ແລະ

ເປັນການສ້າງຂະບວນການ ຫັນໜ້າສູ່ ຊີເກມ ຄັ້ງທີ 25 ທີ່ ສປປ ລາວ ຈະເປັນເຈົ້າພາບ ໃນປີ 2009 ໃຫ້ສົມກຽດ.



ຫໍສະພາ ແຫ່ງຊາດ ສ.ປ.ປ ລາວ ທີ່ນະຄອນຫລວງວຽງຈັນ

ຈຸດປະສົງຕົ້ນຕໍ ຂອງການສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ແມ່ນຢາກໄດ້ຫຍັງແດ່ ?

1. ກ່ອນອື່ນໝົດ ແມ່ນເຮັດໃຫ້ຊາວລາວທົ່ວປະເທດ, ໂດຍສະເພາະ ຊາວນະຄອນຫລວງ ວຽງຈັນ ທຸກເຜົ່າຊົນ, ທຸກຊັ້ນຄົນ, ທຸກເພດທຸກໄວ ໃຫ້ເຫັນໄດ້ຕົ້ນກຳເນີດ ມູນເຊື້ອ ແລະ ຂະ ບວນວິວັດ ແຫ່ງການເຕີບໃຫຍ່ ຂະຫຍາຍຕົວຂອງ ນະຄອນຫຼວງວຽງຈັນ, ບົນພື້ນຖານ ດັ່ງກ່າວ ແມ່ນເພື່ອເຊີດຊູ ຄວາມຕື່ນຕົວດ້ານການເມືອງ, ເພີ່ມທະວີຄວາມສາມັກຄີປອງດອງຊາດ, ເສີມ ຂະຫຍາຍນ້ຳໃຈຮັກຊາດ, ສິດເປັນເຈົ້າຕົນເອງເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ປະກອບສ່ວນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາ ນະຄອນຫລວງ ຂອງປະເທດຊາດ ໃຫ້ຫລຸດພົ້ນ ອອກຈາກຄວາມດ້ອຍພັດທະນາ; ກາຍເປັນຫົວໜ່ວຍ ຍຸດທະສາດ ທີ່ໜັກແໜ້ນ ເຂັ້ມແຂງຮອບດ້ານ, ເສດຖະກິດຂະຫຍາຍໂຕໄວ, ສັງຄົມມີຄວາມຍຸຕິທຳສີວິໄລ ແລະ ມີປະ ຊາທິປະໄຕ, ຕົວເມືອງມີໂສມໜ້າໃໝ່ ແລະ ທັນສະໄໝຢ່າງບໍ່ຢຸດຢັ້ງ.



ຫໍວັດທະນະທຳ ແຫ່ງຊາດ ທີ່ນະຄອນຫລວງວຽງຈັນ

2. ເປີດໂອກາດໃຫ້ ປະຊາຊົນລາວ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ, ບັນດາ ນະຄອນເພື່ອນມິດ ແລະ ສາກົນຮັບຮູ້ວຽງຈັນຫລາຍຂຶ້ນກວ່າເກົ່າ, ສ້າງໃຫ້ໄດ້ເພື່ອນມິດທີ່ຢູ່ໃກ້ ແລະ ຢູ່ໄກໃຫ້ຫຼາຍຂຶ້ນ, ຕີຖອຍຄວາມເຂົ້າໃຈຜິດ ແລະ ຄວາມອາຄາດບາດໝາງ ຂອງກຸ່ມຄົນບໍ່ດີ ຕໍ່ ນະຄອນຫຼວງວຽງຈັນ ກໍ່ຄືຕໍ່ ສປປ ລາວ, ເຮັດໃຫ້ຊື່ສຽງອິດທິພົນຂອງ ນະຄອນຫຼວງວຽງຈັນ ພົ້ນເດັ່ນຂຶ້ນ ໃນເວທີສາກົນອີກບາດກ້າວໜຶ່ງ ຖັດຈາກຜົນສຳເລັດຂອງການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10, ປີ 2004.

3. ຮັບປະກັນຍາດແຍ່ງໃຫ້ໄດ້ຄວາມເປັນໃຈ, ການສະໜັບສະໜູນຂອງຄົນລາວ, ທຸກເຜົ່າ, ທຸກຊັ້ນຄົນ, ທຸກເພດໄວທັງພາຍໃນ ແລະ ຕ່າງປະເທດ ແລະ ເພື່ອນມິດບັນດາ ນະຄອນໃຫ້ທັນໜ້າເຂົ້າມາລົງທຶນ, ທ່ອງທ່ຽວຢ່າງກວ້າງຂວາງ ເປັນຄືກັບປາງບຸນໃຫຍ່ໜຶ່ງ ຂອງຊາດ; ກິດຈະກຳ ແລະ ລາຍການຕ່າງໆ ຂອງງານມີຄວາມປະທັບໃຈ, ຈຸງໃຈ, ສີວິໄລ, ສວຍງາມ, ນຳໃຊ້ເຕັກນິກທັນສະໄໝ, ປະຢັດມັດທະຍັດ ແລະ ລຽບງ່າຍ; ຫລັງຈາກງານສະເຫລີມສະຫລອງແລ້ວ ເຮັດໃຫ້ ນະຄອນຫລວງວຽງຈັນ ມີບາດກ້າວພັດທະນາດີຂຶ້ນທຸກດ້ານ ບັນລຸບັນດາຄາດໝາຍ ທີ່ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ແລະ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງ ຄະນະ

ພັກ ນະຄອນຫລວງວຽງຈັນ ວາງອອກ ເປັນຕົ້ນ 13 ແຜນງານ ແລະ 160 ໂຄງການຂອງ ນະຄອນຫລວງ.



ສຳນັກງານປົກຄອງ ນະຄອນຫລວງວຽງຈັນ

ລະດັບຄາດໝາຍ ຫຼື ກຳນົດໝາຍຂອງການສະເຫລີມສະຫລອງວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ໃຫ້ບັນລຸຫຍັງແດ່ ?

1. ເຮັດໃຫ້ນະຄອນຫລວງ ມີສະຖຽນລະພາບທາງການເມືອງ, ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢ່າງໜັກແໜ້ນ ແກ້ໄຂໄດ້ ໂດຍພື້ນຖານບັນດາປະກົດການຫຍໍ້ທໍ້ ທີ່ພົ້ນເດັ່ນໃນສັງຄົມ.

2. ສຳເລັດການແກ້ໄຂຄອບຄົວທຸກຍາກ ທີ່ຍັງຄົງຄ້າງໃນ ນະຄອນຫຼວງວຽງຈັນ ໃຫ້ໄດ້ 100%, ສູ້ຊົນ ຫຼຸດພົ້ນຈາກຄວາມດ້ອຍພັດທະນາ ໃນເຂດເທດສະບານ ແລະ ແກ້ໄຂເຂດຈຸດສຸມແອອັດ ຈຳນວນໜຶ່ງ.

3. ສຳເລັດໂຄງການຢຸດຕິການ ຖາງປ່າເຮັດໄຮ່ໃຫ້ໄດ້ 100% ດ້ວຍການຫັນໄປສູ່ການຈັດສັນ ອາຊີບຄົງທີ່ໃໝ່ ທີ່ຮັບປະກັນການຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນໃນເຂດນີ້.

4. ປະຕິບັດໂຄງການຜະລິດສິນຄ້າ 12 ໂຄງການໃຫຍ່ 42 ໂຄງການຍ່ອຍ, ເຮັດໃຫ້ ນະຄອນຫລວງວຽງຈັນ ມີສິນຄ້າຂາອອກເກີນດຸນກັບຂາເຂົ້າ.

5. ສຳເລັດໂຄງການ ສ້າງເທດສະບານໃໝ່ ແລະ ໂຄງການສ້າງບ້ານກຸ່ມ ບ້ານພັດທະນາ ໃຫ້ໄດ້ 30%, ສຳເລັດການສ້າງຄຸ້ມເມືອງໃໝ່ ຢູ່ບໍລິເວນບຶງທາດຫລວງ ໄລຍະທຳອິດໃນເນື້ອທີ່ 200 ເຮັກຕາ.

6. ສຳເລັດໂຄງການຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ດ້ານການສັນຈອນ, ໃນເສັ້ນ ທາງຫລວງແຫ່ງຊາດ ແລະ ໃນເຂດຕົວເມືອງຂອງນະຄອນຫລວງ.

7. ກໍ່ສ້າງໂຄງການກັນຕາຝັ່ງເຈື່ອນ ແລະ ສວນສາທາລະນະ ແຄມນ້ຳຂອງ ເຂດທ່າວັດ ຈັນ ໃຫ້ສຳເລັດເປັນສ່ວນໃຫຍ່.

8. ປັບປຸງຍົກລະດັບສະໜາມຫລວງ (ກໍ່ສ້າງອະນຸສາວະລີ ນັກຮົບນິລະນາມໃໝ່ ໃຫ້ສຳ ເລັດໃນປີ 2009, ສວນເຈົ້າໄຊເຊດຖາ ປີ 2009, ເພີ່ມແສງສະຫວ່າງຢູ່ບໍລິເວນນ້ຳພຸ ປີ 2010).

9. ສຳເລັດໂຄງການທາງ A1 (ປີ 2007), ທາງລົດໄຟ (ປີ 2008), ເຂດອຸດສະຫະກຳ ໂຄກສະອາດ, ຕະຫລອດຊາຍແດນ (ປີ 2009).

10. ສຳຫລວດ ແລະ ສຳເລັດໂຄງການທ່ອງທ່ຽວ ໜອງທາ ແລະ ຕາດຊອມ.

11. ກໍ່ສ້າງ ແລະ ບໍລິການນຳໃຊ້ໂຄງການ ສະໜາມກິລາ ແຫ່ງຊາດ ດົງນາໄຊ 2009 ແລະ ຍົກຍ້າຍສະໜາມ ກຳຈັດຂີ້ເຫຍື້ອ ປີ 2007 - 2008 ໄປບ່ອນໃໝ່.

12. ປັບປຸງຍົກລະດັບຕະຫລາດໃຫຍ່ ປະເພດ 1 ຈຳນວນ 6 ແຫ່ງ; ຕະຫລາດທົ່ງຂັນຄຳ, ຕະຫລາດເຊົ້າ, ຕະຫລາດທາດຫລວງ, ຕະຫລາດສີໄຄ, ຕະຫລາດແລງ, ຕະຫລາດໜອງຈັນ.

13. ດຳເນີນໂຄງການ ຕອບແທນບຸນຄຸນ ບັນດາວິລະບູລຸດ ແຫ່ງຊາດ ແລະ ຜູ້ທີ່ມີຄຸນ ງາມ ຄວາມດີຕໍ່ຊາດ ເຊັ່ນ:

- ສ້າງອານຸສາວະລີ ສົມເດັດເຈົ້າ ເພັດຊະລາດ ແລະ ສະຖານທີ່ປະກາດເອກະລາດ ປີ 1945 (ສ້າງໃໝ່).

- ກໍ່ສ້າງສວນ ເຈົ້າ ອະນຸວົງ ໃຫ້ສຳເລັດ (ປີ 2010), ຍົກລະດັບຖະໜົນ ສຸພານຸວົງ ໃຫ້ ສຳເລັດ (ປີ 2009).

- ສ້າງສວນສີທອງ, ບ້ານ ນາຫອຍປັ້ງ (ສ້າງໃໝ່).

- ປັບປຸງຍົກລະດັບສວນ 23 ສິງຫາ (ເພີ່ມເຕີມ).

- ສ້າງທາງບ້ານວິລະຊົນ (ດົງບັ້ງ ປີ 2007 - 2008).

- ສ້າງໂຮງຮຽນ ບ້ານ ກຸດ 3 ບາດ.

14. ໂຄງການກໍ່ສ້າງເຮືອນຢູ່ອາໄສ ໃຫ້ພະນັກງານ, ລັດຖະກອນດ້ວຍການເຊົ່າ ຫລື ຊື້ ຕາມລະບອບນະໂຍບາຍ ແລະ ກົນໄກການຕະຫລາດ.

15. ໂຄງການຟື້ນຟູຮັກສາສິ່ງແວດລ້ອມໃນຕົວເມືອງ ແລະ ຊານເມືອງ, ປັກຫລັກໝາຍປ່າສະຫງວນແຫ່ງຊາດ 2 ແຫ່ງ ແລະ ປ່າສະຫງວນ ນະຄອນຫລວງວຽງຈັນ 4 ແຫ່ງ; ປັກຫລັກໝາຍບົ່ງໜອງ ແຕ່ລະເຂດໃຫ້ສຳເລັດ 100%.

16. ປູກຕົ້ນໄມ້ໃຫ້ຮົ່ມ ແລະ ເພື່ອຄວາມສວຍງາມ ຕາມເສັ້ນທາງຫລວງ ແຫ່ງຊາດ 13 ເໜືອ -13 ໃຕ້, ທາງເລກທີ 11 ແລະ ເລກ 10 ເລີ່ມແຕ່ 2008 ເຖິງ 2010.

ສະຫລຸບຄວາມວ່າ ເມື່ອສຳເລັດ 16 ກຳນົດໝາຍ ດັ່ງທີ່ກ່າວມານັ້ນ ມັນເປັນການສ້າງໂສມໜ້າ ນະຄອນຫລວງວຽງຈັນ ດ້ວຍ 6 ສ ຄື: ນະຄອນແຫ່ງຄວາມ ***ສະຫງົບສຸກ, ສະອາດ, ສີຂຽວ, ສະຫວ່າງ, ສີວິໄລ ແລະ ສະເໝ່.***

ເນື້ອໃນ ແລະ ໂຄງການຕົ້ນຕໍ ຂອງການກະກຽມຈັດງານ ຄື:

1. ໂຄງການທົບທວນ ປະຫວັດສາດ ວຽງຈັນ, ຊຶ່ງປະກອບມີກິດຈະກຳສຳຄັນຄື: ຄົ້ນຄວ້າ ແລະ ເຜີຍແຜ່ປະຫວັດສາດຂອງ ນະຄອນຫລວງວຽງຈັນ ໃນ 5 ໄລຍະ ປະຫວັດສາດ; ຊຸມນະສູດ ແລະ ຈົດທະບຽນວັດຖຸບູຮານ, ມໍລະດົກທີ່ມີຊື່ລືນາມ ບັນທຶກໄວ້ປຶ້ມ ປະຫວັດສາດ 450 ປີ (ວັດຖຸບູຮານ, ຊັບສິນທາງປັນຍາ, ວັດທະນະທຳ, ປູຊະນີຍະສະຖານທີ່ເປັນມໍລະດົກ), ພະທາດ ຫລວງ, ຫໍພະແກ້ວ, ວັດສີສະເກດ ແລະ ອື່ນໆ... ມໍລະດົກທາງທຳມະຊາດ, ນ້ຳງື່ມ, ນ້ຳຂອງ, ປ່າສະຫງວນ ພູເຂົາຄວາຍ ແລະ ພູພະນັງ, ກຳນົດເຄື່ອງນຸ່ງທີ່ເປັນເອກະລັກຂອງຄົນລາວ ກ່ຳຄື ຄົນ ວຽງຈັນ ແລະ ອື່ນໆ...

2. ໂຄງການປຸກລະດົມ ຂະບວນການພັດທະນາ ແລະ ປົກປັກຮັກສາ ນະຄອນຫລວງ ວຽງຈັນ ໄລຍະໃໝ່, ຊຶ່ງສຸມໃສ່ກິດຈະກຳສຳຄັນ ຄື:

- ຂະບວນການ ປຸກຈິດສຳນຶກດ້ານແນວຄິດ; ສຶກສາອົບຮົມມູນເຊື້ອ ສາມັກຄີປອງດອງ, ນ້ຳໃຈຮັກຊາດ, ມູນເຊື້ອຕໍ່ສູ້ພິລະອາດຫານ, ລົບລ້າງແນວຄິດອາຄາດບາດໝາງຊຶ່ງກັນ ແລະ ກັນທີ່ມີໃນອະດີດ ແລະ ສ້າງແນວຄິດຮັກຊາດ, ຮັກລະບອບໃໝ່, ຮັກນະຄອນຫລວງວຽງຈັນ, ຖື ນະຄອນຫລວງວຽງຈັນ ຄື " ຄວາມພູມໃຈ, ເປັນມິ່ງຂ້ວນໃຈ " ຂອງຄົນລາວທັງຊາດ.

- ຂະບວນການດ້ານເສດຖະກິດ, ສົ່ງເສີມການຜະລິດສິນຄ້າໃໝ່, ຂະບວນການປະກອບການທຸລະກິດ - ບໍລິການເກັ່ງ, ແກ້ໄຂຄອບຄົວທຸກຍາກ ແລະ ຫຼຸດພົ້ນຈາກສະພາວະດ້ອຍພັດທະນາ...

- ດ້ານວັດທະນະທຳ - ສັງຄົມ: ສົ່ງເສີມການແຂ່ງຂັນດ້ານສິລະປະ, ປະກວດນາງງາມ ວຽງຈັນ 450 ປີ, ປະກວດນາງອາພອນລາວ, ປະດິດຄິດແຕ່ງເພງ, ລຳ, ສ້າງຮູບເງົາວຽງຈັນ 450 ປີ ແລະ ແຂ່ງຂັນກິລາຊີ້ງຂັນນະຄອນຫລວງວຽງຈັນ 450 ປີ...

- ຂະບວນການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ; ສ້າງສະຕິປ້ອງກັນປະເທດຊາດ ປ້ອງກັນ ນະຄອນຫລວງວຽງຈັນ ທົ່ວປວງຊົນ, ຫັນລົງກໍ່ສ້າງ ຮາກຖານການເມືອງ ສ້າງບ້ານ ແລະ ກຸ່ມບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ ຊຶ່ງກົມການເມືອງ ແລະ ລັດຖະບານຕົກລົງໄວ້ໃຫ້ປະກົດເປັນຈິງ, ສູ້ຊົນປະຕິບັດໂຄງການກຳຈັດປັດເປົ່າ 4 ປະກົດການຫຍໍ້ທໍ້ໃນສັງຄົມ.

- ຂະບວນການປຸກລະດົມ ພີ່ນ້ອງ ຊາວລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໃຫ້ຫັນໜ້າມາປະກອບສ່ວນ ເຂົ້າໃນການສ້າງສາ ປະເທດຊາດ ແລະ ສ້າງເມືອງຫລວງ ຮ່ວມກັນກັບທົ່ວປວງຊົນເຮົາ, ດູດດຶງບັນດາ ນະຄອນ ເພື່ອນມິດມາທ່ອງທ່ຽວ, ລົງທຶນຢູ່ ວຽງຈັນ ຕາມຈິດໃຈ " ນະຄອນໜຶ່ງ ກົດຈະກຳໜຶ່ງ ".

3. ໂຄງການປະຕິສັງຂອນ ແລະ ກໍ່ສ້າງສາທາລະນຸປະໂພກ:

+ ຍົກລະດັບຫລັກເມືອງ (ວັດສີເມືອງ).

+ ບູລະນະກຳແພງເມືອງເກົ່າ, ສ້ອມແປງວັດສີສະເກດ, ປັບປຸງກົມມະລຽນພະທາດຫຼວງ ດ້ານຕາເວັນອອກ, ຖະໜົນ 450 ປີ, ສ້າງສຳນັກງານນະຄອນຫລວງໃໝ່ (ສັນຍາລັກ 450 ປີ).

4. ໂຄງການປະດັບປະດາຕົວເມືອງ, ປະກອບມີກົດຈະກຳ, ຂະຫຍາຍໄຟແສງສະຫວ່າງ ສາທາລະນະ, ທາສີເຮືອນ, ປຸກຕົ້ນໄມ້ປະດັບ, ປູກຫຍ້າແຄມທາງໃຫຍ່, ດ້ວຍທຶນຮອນຂອງຕົນເອງ; ຄຳຂ້ອນຕາມເສັ້ນທາງ, ສຳນັກງານ, ໂຮງຈັກໂຮງງານ, ສະຖານທີ່ສຳຄັນຕ່າງໆ.

5. ໂຄງການກຳນົດຜັງເມືອງ ແລະ ຮູບຈຳລອງຜັງເມືອງນະຄອນວຽງຈັນ ຊຶ່ງປະກອບມີກົດຈະກຳຕ່າງໆ ເຊັ່ນ: ກຳນົດຜັງ ເມືອງວຽງຈັນ ສະບັບທີ 3 ໃຫ້ສຳເລັດ, ສ້າງຮູບຈຳລອງ ວຽງຈັນໃໝ່, ວຽງຈັນ ສະຕະວັດທີ 21, ປະກວດເຮືອນງາມຊົງລາວ ແລະ ອື່ນໆ...

6. ໂຄງການຈັດງານວາງສະແດງ ແລະ ໄຂເທດສະການທ່ອງທ່ຽວ, ປະກອບມີກົດຈະກຳ: ວາງສະແດງກ່ຽວກັບ ຜັງເມືອງ ນະຄອນຫລວງວຽງຈັນ ແລະ ຜັງເມືອງ ຂອງນະຄອນ ປະເທດເພື່ອນມິດ, ວາງສະແດງສິນຄ້າ ແລະ ໄຂເທດສະການທ່ອງທ່ຽວວຽງຈັນ 450 ປີ ແລະ ອື່ນໆ...

7. ໂຄງການຈັດງານໂຮມຊຸມນຸມໃຫຍ່ ສະເຫລີມສະຫລອງ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ ຊຶ່ງປະກອບມີກົດຈະກຳຕ່າງໆ ເຊັ່ນ: ກຳນົດສະຖານທີ່ຈັດງານ, ສະຖານທີ່ພັກເຊົາ, ກຳນົດໂຄງປະກອບຂອງຄະນະຜູ້ແທນພາຍໃນ ແລະ ຕ່າງປະເທດ, ເວລາຈັດງານ, ວາລະ ແລະ ລາຍການຈັດງານສະແດງ ມະຫາກຳສິລະປະ ແຫ່ງຊາດ, ສາກົນ, ບົດປາໃສຂອງເຈົ້າຄອງ ນະຄອນຫລວງວຽງຈັນ, ບົດສະດຸດີຂອງປະທານປະເທດ, ປະດັບຫລຽນໄຊ ພັດທະນາ ຫລື ປະດັບນາມມະຍົດວິລະຊົນແຫ່ງຊາດແກ່ນະຄອນຫລວງວຽງຈັນ...



ກະຊວງປ້ອງກັນປະເທດແຫ່ງ ສ.ປ.ປ.ລາວ



ກະຊວງການຕ່າງປະເທດແຫ່ງສ.ປ.ປ.ລາວ

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
ooooooo

ຄະນະກຳມະການຈັດງານ ວຽງຈັນ 450 ປີ

ເລກທີ....02...../450 ປີ
ວັນທີ..2..6..JAN..2010

ຂໍ້ຕົກລົງ
ວ່າດ້ວຍການແຕ່ງຕັ້ງ ແລະ ແບ່ງປັນງານຂອງ ອະນຸກຳມະການ ກະກຽມ ຈັດງານ ສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ.

- ອີງຕາມ: ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 413/ນຍ, ລົງວັນທີ 29/9/ 2009. ວ່າດ້ວຍການຈັດງານ ສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ.
- ກອງປະຊຸມຄົບ ຄະນະກຳມະການງານ ສະເຫລີມສະຫລອງ ວຽງຈັນ 450 ປີ ຄັ້ງວັນທີ 03/ 08/2009.
- ການຄົ້ນຄວ້າ ແລະ ນຳສະເໜີ ຂອງທ່ານເຈົ້າຄອງ ນະຄອນຫລວງວຽງຈັນ ຄັ້ງວັນທີ....

ປະທານຄະນະກຳມະການ ຈັດງານ ວຽງຈັນ ຄົບຮອບ 450 ປີ ຕົກລົງ:

ມາດຕາ 1: ແຕ່ງຕັ້ງອະນຸກຳມະການ ແລະ ແບ່ງງານໃຫ້ບັນດາທ່ານໃນ ຄະນະກຳມະການ ກະກຽມ ສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ດັ່ງນີ້:

❄ **ຄະນະອະນຸກຳມະການທົບທວນ, ຮີບໂຮມ ແລະ ຂຽນປະຫວັດສາດ ນະຄອນຫລວງ ວຽງຈັນ 450 ປີ.**

1. ທ່ານ ພົ.ຕ ຈັນສະໝອນ ຈັນຍາລາດ — ຫົວໜ້າຄະນະ
2. ທ່ານ ດວງດີ ອຸດທະຈັກ — ຮອງຄະນະ
3. ທ່ານ ພົ.ອ ວິໄລ ດວງມະນີ — ຮອງຄະນະ
4. ທ່ານ ພະອາຈານ ວິຈິດ ສີງຫາລາດ — ຄະນະ
5. ທ່ານ ດຣ ແຂກແກ້ວ ຊ້ອຍໄຊຍະ — ຄະນະ
6. ທ່ານ ທ້ຽມ ພິມມະຈັນ — ຄະນະ
7. ທ່ານ ຄຳຕັນ ຈັນທະລາ — ຄະນະ
8. ທ່ານ ບົວສີ ຈະເລີນສຸກ — ຄະນະ
9. ທ່ານ ຄຳເພົາ ພອນແກ້ວ — ຄະນະ
10. ທ່ານນາງ ເຂັມເພັດ ພົນເສນາ — ຄະນະ

11. ທ່ານ ດຣ ທອງຄຳ ອ່ອນມະນີສອນ ຄະນະ
12. ທ່ານ ນາງ ດາລາ ກັນລະຍາ ຄະນະ
13. ທ່ານ ດຣ ສົມພາວັນ ອິນທະວົງ ຄະນະ
14. ທ່ານ ນາງ ຍອດແກ້ວມະນີ ສຸພານຸວົງ ຄະນະ
15. ທ່ານ ນາງ ພູວຽງ ແກ້ວວົງຈິດ ຄະນະ

❄ **ໜ່ວຍງານຊ່ວຍວຽກງານ, ຮຽບຮຽງ ບັນນາທິການ ແລະ ຈັດພິມ:**

1. ທ່ານ ພັ.ທ ສາຍສະໝອນ ສະຫຼັບແສງ ຫົວໜ້າຄະນະ
2. ທ່ານ ພັ.ທ ດຣ ທອງເສັດ ພິມມະວົງ ຮອງຄະນະ
3. ທ່ານ ພັ.ທ ບຸນທອນ ອຸປະພັນ ຄະນະ
4. ທ່ານ ພັ.ທ ບຸນສອນ ຄຳມະນີວົງ ຄະນະ
5. ທ່ານ ພັ.ທ ດຣ ວິລະພັນ ດວງມະນີ ຄະນະ
6. ທ່ານ ພັ.ທ ວັນນະແສງ ໃຈອິສານ ຄະນະ
7. ທ່ານ ພັ.ຕ ຂາວມະນີ ສີພອນ ຄະນະ
8. ທ່ານ ພັ.ຕ ສີໄພ ແກ້ວບຸນມີ ຄະນະ
9. ທ່ານ ພົງສະຫວັນ ສີລິພັນ ຄະນະ.

ມາດຕາ 2: ມອບໃຫ້ແຕ່ລະອະນຸກຳມະກອນ ຮັບຜິດຊອບໃນການຂຶ້ນໂຄງການ ແລະ ງົບປະມານໃຊ້ຈ່າຍ ບົນຈິດໃຈ ປະຢັດມັດທະຍັດ ແລະ ຮັບປະກັນການເຄື່ອນໄຫວ ໃຫ້ມີປະສິດທິຜົນ.

ມາດຕາ 3: ໃນກໍລະນີ ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຫາກມີການສັບຊ້ອນ ໄປຮັບໜ້າທີ່ໃໝ່ ສະເໜີໃຫ້ມີການປ່ຽນແທນ ຕາມຄວາມເໝາະສົມ.

ມາດຕາ 4: ທຸກການຈັດຕັ້ງພັກ - ລັດ ທີ່ກ່ຽວຂ້ອງ ແລະ ບັນດາສະຫາຍ ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ມາດຕາ 5: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ

ປະທານຄະນະກຳມະການຈັດງານວຽງຈັນ ຄົບຮອບ 450 ປີ

ສົມສະຫວາດ ເລ່ງສະຫວັດ

ປົດຄຳເຫັນ

ຂອງທ່ານ ສົມບັດ ເຢຍລີເຮີ ເລຂາທິການສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງນະຄອນຫລວງວຽງຈັນ ຕໍ່ປະຫັວດສາດ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ



ເມື່ອຫວນຄືນອະດີດທີ່ຍາວໄກຂອງປະຫວັດສາດຊາດລາວ **ເວົ້າລວມ,** ນະຄອນຫລວງວຽງຈັນ **ເວົ້າສະເພາະ** ຍິ່ງເຮັດໃຫ້ພວກເຮົາເຫັນໄດ້ຄວາມສຳຄັນຂອງສິດທິທຳມະຊາດ, ສິດທິເປັນມະນຸດ, ສິດເປັນເຈົ້າຂອງປະເທດຊາດ ແລະ ເປັນເຈົ້າຂອງ ນະຄອນຫລວງ ທີ່ແສນຮັກ ແລະ ຫວງແຫນຫາອັນປຽບບ່ໍໄດ້. ພ້ອມກັນນັ້ນ, ຖ້າ ພວກເຮົາຢາກກ້າວໄປຂ້າງໜ້າ ກ່ໍຍິ່ງເຮັດໃຫ້ພວກເຮົາຕ້ອງຄົ້ນຄວ້າ ຢ່າງເລິກເຊິ່ງ ອະດີດແຫ່ງຄວາມເປັນມາຂອງຄົນລາວ, ຊາດລາວ ແລະ ນະຄອນຫລວງຂອງລາວ, ຊຶ່ງສອດຄ່ອງກັບຄຳສຸພາສິດລາວທີ່ວ່າ: **" ຢາກໄປຂ້າງໜ້າໃຫ້ ເບິ່ງຄືນຫລັງ... "**.

ອະດີດຕະການໄດ້ຢັ້ງຢືນໃຫ້ພວກເຮົາເຫັນແລ້ວວ່າ: **" ຊາດລາວ-ຄົນລາວ-ນະຄອນຫລວງ ຂອງລາວ "** ໄດ້ກຳເນີດຂຶ້ນມາຜ່ານຫລາຍພັນປີແລ້ວ ແລະ **" ເມືອງວຽງຈັນ-ຄົນວຽງຈັນ "** ກ່ໍໄດ້ ກຳເນີດຂຶ້ນມາ ເຖິງ 2317 ປີພໍດີ, ຄືນັບແຕ່ປີ **ພສ** 236 ກ່ອນ **ຄສ** 307 ປີ ໂດຍແມ່ນ**ທ້າວ ບູລີຈັນ (ຫລື ບູລີຈັນອ່ວຍລ່ວຍ)** ເປັນຜູ້ສ້າງຕັ້ງຂຶ້ນທຳອິດ ແລະ ຂະໜານນາມວ່າ: **" ພະຍາ ຈັນທະບູລີ ປະສິດທິສັກ "** ທ່ານເປັນຜູ້ໃຫ້ກຳເນີດ ແລະ ສ້າງສາພັດທະນາເມືອງວຽງຈັນ ດ້ວຍຄວາມສັດຊື່ບໍລິສຸດ, ເຕັມໄປດ້ວຍຄວາມເມດຕາປານີພີ່ນ້ອງຮ່ວມຊາດດຽວກັນ, ດຸໝັ່ນຂະຫຍັນພຽນ, ຝັກໃຝ່ໃນ ສາສະໜາ ຈຶ່ນເຮັດໃຫ້ຊາວເມືອງວຽງຈັນ ສະໄໝນັ້ນຢູ່ເຢັນເປັນສຸກ ແລະ ນັບຖືຮັກແພງຢ່າງສູງ ສົ່ງ. ຍ້ອນແນວນັ້ນ ບັນດາຫົວເມືອງທີ່ຢູ່ໃກ້ ແລະ ຢູ່ໄກຕ່າງ ກ່ໍໄດ້ສະແດງຄວາມປິຕິຍິນດີ, ທັງສົ່ງ ຕົວແທນນຳເອົາເຄື່ອງບັນນາ ການມາຜູກມິດໄມຕີຢ່າງກວ້າງຂວາງ.

ແຕ່ຕໍ່ຈາກນັ້ນມາ ເປັນເວລາດົນນານສົມຄວນ, ຄືມາເຖິງສະໄໝຂອງ ເຈົ້າ ຟ້າງຸ່ມ ມະຫາ ລາດ, ເມືອງວຽງຈັນໃນສະໄໝນັ້ນ ບ່ໍໄດ້ຖືກບັນທຶກໄວ້ຢ່າງຈະແຈ້ງວ່າ ມີຜູ້ໃດຂຶ້ນເປັນເຈົ້າປົກ ຄອງເມືອງ, ພຽງແຕ່ຍົກໃຫ້ເຫັນວ່າ: ຕະຫຼອດໄລຍະເວລາ ທີ່ເມືອງວຽງຈັນ ຂຶ້ນກັບອານາຈັກສີໂຄດ ຕະບອງຂອງຊົນເຜົ່າຂອມ, ເມືອງວຽງຈັນ ພຽງແຕ່ເປັນຫົວເມືອງໜຶ່ງທີ່ນອນຢູ່ໃນ 17 ຕົວເມືອງ

ຂອງອານາຈັກສີໂຄດຕະບອງເທົ່ານັ້ນ. ຈົນມາເຖິງການປົກຄອງຂອງເຈົ້າຟ້າງຸ່ມ, ເມືອງວຽງຈັນ ຈຶ່ງ ໄດ້ປະກົດແຈ້ງຂຶ້ນມາໃນໜ້າປະຫັວດສາດອີກ ຄືເມືອງວຽງຈັນ ໄດ້ເປັນເມືອງໃຫຍ່ ແລະ ມີເມືອງ ນ້ອຍ ທີ່ຂຶ້ນກັບ 5 ເມືອງ ຄື: ຈັນທະບູລີ, ສີສັດຕະນາກ, ຫາດຊາຍຟອງ, ໄຊເຊດຖາ ແລະ ສີໂຄດ ຕະບອງ ໂດຍແມ່ນ **ທ້າວ ຊຽງມຸງ** ເປັນເຈົ້າປົກຄອງເມືອງ. ເມື່ອ ເຈົ້າ ຟ້າງຸ່ມ ຕີເມືອງວຽງຈັນ ໄດ້ ແລ້ວກໍ່ແຕ່ງຕັ້ງ**ບາຄຸ້ມ** ເປັນເຈົ້າປົກຄອງ ເມືອງວຽງຈັນ ແທນ **ທ້າວ ຊຽງມຸງ**. ໃນເວລາຕໍ່ມາແມ່ນ **ທ້າວ ວັງບູລີ** ຂຶ້ນເປັນເຈົ້າປົກຄອງເມືອງວຽງຈັນ ໃນປີ 1417. **ເຈົ້າ ຊາຍມຸ່ຍ** ຂຶ້ນເປັນເຈົ້າປົກຄອງເມືອງວຽງ ຈັນ ລະຫວ່າງປີ 1456. **ພະຍາ ຈັນຫງອກ** ຂຶ້ນເປັນເຈົ້າປົກຄອງເມືອງວຽງຈັນ ໃນລະຫວ່າງປີ 1479. ຕໍ່ມາແມ່ນ **ພະຍາ ແສນສຸລິນທະລີໄຊ** ແລະ ສຸດທ້າຍແມ່ນ **ພະຍາ ສີຫັດທຳມະໄຕໂລກ** ຂຶ້ນເປັນ ເຈົ້າປົກຄອງເມືອງວຽງຈັນ ໃນປີ 1550. ຈົນມາເຖິງສະໄໝ **ເຈົ້າໄຊຍະເຊດຖາທິລາດ** ສ້າງຕັ້ງ ເມືອງ ວຽງຈັນ ເປັນນະຄອນຫລວງ ໃນປີ 1560. ຕໍ່ຈາກນີ້ ຈົນມາເຖິງວັນສະຖາປະນາປະເທດ ສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 1975, ຕາມຂໍ້ມູນບໍ່ທັນຄົບຖ້ວນສ່ອງແສງໃຫ້ເຫັນວ່າ ປະຫວັດສາດຂອງວຽງຈັນ ກໍ່ບໍ່ໄດ້ບັນທຶກເຖິງຜູ້ປົກຄອງນະຄອນຫຼວງ, ມີແຕ່ຍົກໃຫ້ເຫັນເຖິງຜົນງານ ການປົກປັກຮັກສາ ແລະ ພັດທະນາປະເທດຊາດ ຈົນເປັນອັນຂຶ້ນຊື່ລືນາມດ້ານຄວາມສີວິໄລ, ສວຍ ງາມ ແລະ ອຸດົມຮັ່ງມີແຕ່ຄຽງຄູ່ກັນນັ້ນ ພັດຍົກໃຫ້ເຫັນເຖິງຄວາມພັງພິນາດ ຈົນກາຍເປັນເມືອງຮ້າງ, ເປັນຫົວເມືອງຂຶ້ນຢ່າງແສນສາຫັດ ໃຫ້ແກ່ສັກດິນາ ແລະ ຈັກກະພັດຕ່າງຊາດ.

ມາເຖິງປີ 1975 ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ, ສ້າງຕັ້ງອຳນາດການປົກຄອງ ປະຕິວັດຂຶ້ນຢ່າງສະຫງ່າຜ່າເຜີຍ. ນະຄອນຫລວງວຽງຈັນ ໄດ້ຖືກກອບກູ້ ແລະ ປົວແປງໃຫ້ສວຍສົດ ງົດງາມຂຶ້ນມາອີກຄັ້ງໃໝ່ ໂດຍແມ່ນຄະນະບໍລິຫານງານພັກ, ອົງການປົກຄອງນະຄອນຫລວງວຽງ ຈັນ ເປັນຜູ້ນຳພາ, ບໍລິຫານບ້ານເມືອງ ພາຍໃຕ້ການນຳພາຢ່າງໃກ້ສິດ ຂອງກົມການເມືອງສູນກາງ ພັກ, ສະພາແຫ່ງຊາດ, ລັດຖະບານແຫ່ງ ສປປ ລາວ ແລະ ມີປະຊາຊົນບັນດາຊົນເຜົ່າຕ່າງໆ ໃນ ທົ່ວປະເທດ ເປັນກຳລັງຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ພັດທະນາ ນະຄອນຫລວງຂອງພວກເຮົາຈົນເທົ່າທຸກມື້ນີ້. ນະຄອນຫລວງວຽງຈັນ ນັບວັນສົມຊື່ ເປັນໃຈກາງການ ເມືອງ, ເສດຖະກິດ, ເປັນສັນຍາລັກວັດທະນະທຳແຫ່ງຊາດລາວ, ທັງເປັນສູນກາງ ຂອງວຽກງ້ອງ ກັນຊາດ ແລະ ການພົວພັນສາກົນ.

ບໍ່ມີຄວາມລະທົມຂົມຂື່ນໃດ ເທົ່າກັບຄວາມລະທົມຂົມຂື່ນ ເມື່ອນະຄອນຫຼວງຂອງລາວ ຖືກ ເຜົາເປັນເຖົ່າຖ່ານ; ບໍ່ມີຄວາມສຸກໃດເທົ່າຄວາມສຸກທີ່ໄດ້ເກີດມາເປັນຄົນລາວ ແລະ ພວກເຮົາຄົນ ລາວທຸກຄົນໄດ້ອຸທິດສະຕິປັນຍາ, ເຫື່ອແຮງ, ວັດຖຸປັດໃຈອັນໜ້ອຍໆຂອງຕົນ ເຂົ້າໃນການປົກປັກ ຮັກສາ, ພັດທະນາ ນະຄອນຫລວງອັນແສນຮັກ ແລະ ຫວງແຫນຂອງພວກເຮົາ.

ນະໂອກາດ ງານສະເຫລີມສະຫລອງ ວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ຊຶ່ງເຕັມໄປດ້ວຍຄວາມໝາຍ, ຄວາມສຳຄັນອັນຍິ່ງໃຫຍ່ ຊຶ່ງໃນປະຫວັດສາດທີ່ຜ່ານມາ ກໍ່ໄດ້ມີ ເຈົ້າຟ້າງຸ່ມ ມະຫາລາດ ເຄີຍສະຫລອງໄຊໃຫຍ່ 7 ມື້ 7 ຄືນ ແລະ ເຈົ້າ ໄຊຍະເຊດຖາທິລາດ ກໍ່ໄດ້ສະເຫລີມສະຫລອງໃຫຍ່ 7 ມື້ 7 ຄືນ ຢູ່ທີ່ ນະຄອນຫລວງວຽງຈັນ ແຫ່ງນີ້ມາແລ້ວ. ແຕ່ງານສະເຫລີມສະຫລອງ ວຽງຈັນ ເປັນນະຄອນຫລວງ ຄົບຮອບ 450 ປີ ໃນຄັ້ງນີ້ ແມ່ນການສະເຫລີມສະຫລອງ ໃນຈຸດເວລາທີ່ປະເທດຊາດມີສັນຕິພາບ, ມີເອກະລາດ, ມີອຳນາດອະທິປະໄຕ, ປະຊາຊົນລາວບັນດາຊົ້ນຄົນເຜົ່າຕ່າງໆ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ນະຄອນຫລວງວຽງຈັນ ພວມດຳລົງບົດບາດ ເປັນສູນກາງທາງດ້ານການເມືອງ, ເສດຖະກິດ - ວັດທະນະທຳ, ສັງຄົມ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ການພົວພັນສາກົນ ແລະ ມີຄວາມໝັ້ນໝາຍທີ່ຈະສ້າງ ນະຄອນຫລວງວຽງຈັນ ໃຫ້ກາຍເປັນສູນກາງພູມມີພາກ ໃນອານຸພາກພື້ນ ແມ່ນຳ້ຂອງ ໃນຕົ້ນສະຕະວັດນີ້ ເປັນນະຄອນຫລວງທີ່ໜ້າຢູ່, ມີສະເໜ່ ແລະ ສີວິໄລ.

ໃນຖານະ ເລຂາທິການສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງນະຄອນຫລວງວຽງຈັນ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງຈິງໃຈ ຕໍ່ອະນຸກຳມະການທົບທວນປະຫວັດສາດວຽງຈັນ 450 ປີ ທີ່ໄດ້ມີຄວາມມານະບາກບັ່ນພະຍາຍາມສຸມສະຕິປັນຍາ, ເຫື່ອແຮງ, ຄວາມຮູ້, ຄວາມສາມາດຂອງຕົນເຂົ້າໃນການຄົ້ນຄວ້າ, ຮີບໂຮມ ແລະ ຂຽນປຶ້ມປະຫວັດສາດເຫຼັ້ມນີ້ ຈົນສຳເລັດຜົນເປັນຢ່າງດີມາ ນະໂອກາດນີ້ດ້ວຍ.

ນະຄອນຫລວງວຽງຈັນ, ວັນທີ 19 ພຶດສະພາ 2010

ເຈົ້າຄອງນະຄອນຫລວງວຽງຈັນ



ສົມບັດ ເຢຍ ລີເຮີ

ຄຳນຳ



ທ່ານ ຈັນສະໝອນ ຈັນຍະລາດ ກຳມະການສູນກາງພັກ, ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ, ຫົວໜ້າ ຄະນະອະນຸກຳມະການທິບທວນ, ຮີບໂຮມ ແລະ ຂຽນ ປະຫວັດສາດ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ

ວຽງຈັນ ເປັນເມືອງໜຶ່ງທີ່ເກົ່າແກ່ທີ່ສຸດໃນປະຫວັດສາດຂອງຊາດລາວ ແຕ່ບູຮານນະການ, ຖືກສ້າງຕັ້ງຂຶ້ນ ແຕ່ປີ 236 ກ່ອນ ຄ.ສ. ຊຶ່ງເຊື່ອກັນວ່າແມ່ນ ທ້າວ ບູລີຈັນ ເປັນຜູ້ນຳພາສ້າງ, ຕໍ່ມາກໍ່ໄດ້ກາຍເປັນບ້ານວຽງຈັນ ແລະ ເປັນເມືອງວຽງຈັນ ທີ່ມີຊື່ສຽງ, ເປັນທີ່ຕັ້ງທີ່ອຸດົມສົມບູນເຕັມໄປດ້ວຍຊັບໃນດິນ, ສິນໃນນ້ຳນາໆພັນ, ເປັນອູ່ເຂົ້າ, ອູ່ປາ, ປະຊາຊົນບັນດາເຜົ່າ ທຳມາຫາກິນຢ່າງໜາແໜ້ນ ແລະ ເປັນເຈົ້າຕົນເອງ; ມີວັດທະນະທຳຫຼາກຫຼາຍສີສັນ ທີ່ເປັນເອກະລັກໃນແຕ່ລະຍຸກແຕ່ລະສະໄໝຂອງແຕ່ລະຊົນເຜົ່າ; ມີເງື່ອນໄຂອຳນວຍຄວາມສະດວກໃນການພັດທະນາເສດຖະກິດ, ສັງຄົມ ກວ່າຕົວເມືອງອື່ນໆໃນທົ່ວປະເທດ, ທັງມີການພົວພັນກັບຕ່າງປະເທດຢ່າງກວ້າງຂວາງ, ຊຶ່ງໄດ້ຮັບການຍ້ອງຍໍສັນລະເສີນ ຈາກຊາວຕ່າງຊາດ ທີ່ເຂົ້າມາພົວພັນຄ້າຂາຍ ຫຼື ຜູກມິດໄມຕີກັບຊາວວຽງຈັນ ໃນແຕ່ລະຍຸກແຕ່ລະສະໄໝເປັນຢ່າງດີ. ອັນພົ້ນເດັ່ນທີ່ສຸດ ແມ່ນເປັນເມືອງທີ່ຕັ້ງພູມສັນຖານຍຸດທະສາດ ຢູ່ໃຈກາງຂອງປະເທດລາວ ລ້ານຊ້າງ ໃນເວລານັ້ນ, ຊຶ່ງເປັນ ທີ່ເພິ່ງພໍໃຈໃຫ້ແກ່ບັນດາກະສັດຂອງລາວ ເພື່ອສ້າງຕັ້ງເປັນ ນະຄອນຫລວງ ຂອງອານາຈັກລາວ ລ້ານຊ້າງ. ດັ່ງນັ້ນ ມາໃນປີ 1560 ເຈົ້າ ໄຊເຊດຖາທິລາດ ຈຶ່ງຕົກລົງປົງໃຈຍ້າຍ ນະຄອນຫລວງ ຫຼື ລາຊະທານີ ຈາກ ນະຄອນຊຽງທອງ ມາຕັ້ງຢູ່ ນະຄອນວຽງຈັນ ແລະ ສະຖາປະນາ ຊື່ວ່າ: ນະ ຄອນຈັນທະບູລີ ສີສັດຕະນາຄະນະຫຸດ ອຸດຕະມະລາຊະທານີ. ປະຈຸບັນເອີ້ນວ່າ ນະຄອນຫຼວງ ວຽງຈັນ.

ພາຍໃຕ້ລະບອບໃໝ່ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບົນເສັ້ນທາງກ້າວຂຶ້ນສັງຄົມນິຍົມ, ນະຄອນຫລວງວຽງຈັນ ນັບວັນນັບໄດ້ຮັບການພັດທະນາ ໃຫ້ກ້າວໜ້າໄປຕາມຍຸກສະໄໝ, ມັ່ງຄັ່ງ, ເຂັ້ມແຂງ ແລະ ຈະເລີນຮຸ່ງເຮືອງ, ສີວິໄລ, ເປັນສູນກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ, ການຕ່າງປະເທດ ແລະ ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຄືດັ່ງວັນນີ້.

ປະຫວັດສາດ ນະຄອນຫລວງວຽງຈັນ ແມ່ນຂະບວນວິວັດໜຶ່ງ ທີ່ຕິດພັນກັບ ປະຫວັດສາດ ຄວາມເປັນມາແຫ່ງການກຳເນີດ, ການຄົງຕົວ ແລະ ຂະຫຍາຍຕົວຂອງປະເທດຊາດເຮົາ.

ຊຶ່ງຜ່ານເສັ້ນທາງ ທີ່ລະອິດລະອ້ຽວຂ້ຽວຂາດ, ມີທັງໄລຍະຂຶ້ນຊັນຊາທີ່ເປັນໜ້າພາກພູມໃຈ, ມີທັງໄລຍະທີ່ຊຸດໂຊມ, ແຕກແຍກຖືກທຳລາຍຈາກການຮຸກຮານ, ປຸ້ນສະດົມຈາກສັກດິນາ ແລະ ຈັກກະພັດພາຍນອກ, ສ້າງຄວາມເຈັບແສບ, ຄວາມຄຽດແຄ້ນເປັນທີ່ສຸດ ໃຫ້ແກ່ຊາວນະຄອນຫລວງວຽງຈັນ ກໍ່ຄືປວງຊົນລາວທັງຊາດ ທີ່ບໍ່ອາດຈະຫລົງລືມໄດ້. ເພາະສະນັ້ນ, ການທົບທວນຄືນຮ່ອງຮອຍ ແລະ ຄົ້ນຟອງ ປະຫວັດສາດ ດັ່ງກ່າວ ຈຶ່ງເປັນສິ່ງສຳຄັນທັງແມ່ນຄວາມຈຳເປັນພາວະວິໄສ ໃຫ້ແກ່ການອານຸລັກຮັກສາ ວັດທະນະທຳຂອງຊາດ, ເສີມຂະຫຍາຍມູນເຊື້ອແຫ່ງຄວາມສາມັກຄີ ແລະ ນ້ຳໃຈຕໍ່ສູ້ອັນອົງອາດກ້າແກ່ນຂອງບັນດາບັນພະບູລຸດ ແລະ ວິລະບູລຸດ ແລະ ນັກຮັກຊາດຫລາຍໆຮຸ່ນຄົນ ທີ່ຕໍ່ສູ້ດ້ວຍການເສຍສະຫລະຊີວິດ ຢ່າງພິລະອາດຫານບໍ່ຍອມຈຳນົນຕ້ານກັບການຮຸກຮານ ຈາກສັດຕູພາຍນອກ ເພື່ອຄວາມເປັນເອກະລາດແຫ່ງຊາດ ເພື່ອໄວ້ເປັນແວ່ນແຍງໃຫ້ແກ່ຄົນຮຸ່ນຫລັງສືບທອດຕໍ່ໄປ, ດັ່ງຄຳກອນ ບາງຕອນຂອງນັກກາວີປະຫວັດສາດຂອງລາວ ພາຍຫລັງ ວຽງຈັນ ຖືກເຜົາຜານຈາກສັກດິນາສະຫຍາມ ທີ່ຍັງຊົງຈຳໃນດວງໃຈຂອງຊາວລາວບັນດາເຜົ່າທັງຊາດ ທີ່ວ່າ: "...ໃຜວ່າ ວຽງຈັນ ເສົ້າ ເຊົ້າສາເດີ່ຢ່າຟ້າວວ່າ ມັນຊິໂປ້ບາດຫລ້າ ໝາກແຕງຊ້າງໜ່ວຍປາຍ... ແທ້ແລ້ວ "... ນັ້ນກໍ່ຄື ຍຸກລາວກ້າວໜ້າ ຄື ປະຈຸບັນນີ້ແລ້ວ.

ການຄົ້ນຄວ້າ, ຮີບໂຮມ ແລະ ຂຽນ ປະຫວັດສາດ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ. ບໍ່ໝາຍວ່າເປັນການປຸກລະດົມຈິດໃຈຊາດນິຍົມ, ແຕ່ແມ່ນເພື່ອໃຫ້ທຸກຄົນໃນຊາດຮູ້ຈັກຢ່າງເປັນເອກະພາບນຳກັນ ເຖິງປະຫວັດຄວາມເປັນມາ (ການກຳເນີດ ແລະ ຂະຫຍາຍຕົວ) ຂອງຊາດລາວ ໃນແຕ່ລະຍຸກສະໄໝ ຊຶ່ງລ້ວນແຕ່ຕິດພັນກັບ ນະຄອນຫລວງວຽງຈັນ, ເພື່ອໃຫ້ຄົນຮຸ່ນໃໝ່ຕໍ່ໆໄປ ຮູ້ແຈ້ງເຖິງການຕໍ່ສູ້ອັນທໍລະຫົດອົດທົນ, ລຳບາກຍາວນານຂອງບັນດານັກຮົບຜູ້ຮັກຊາດ ທີ່ດຳເນີນການຕໍ່ສູ້ ເພື່ອຄວາມເປັນຊາດລາວ ຂອງບັນດາບັນພະບູລຸດ, ໃນການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາ ແລະ ຈັກກະພັດ (ຕ່າງດ້າວ) ຍາດໄດ້ໄຊຊະນະຢ່າງສົມບູນໃນປີ 1975, ສະຖາປະນາ ລະບອບໃໝ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກ້າວຂຶ້ນບົນເສັ້ນທາງສັງຄົມນິຍົມ, ພາຍໃຕ້ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວຂອງລະບອບທຶນນິຍົມ.

ການຂຽນປະຫວັດນະຄອນຫລວງວຽງຈັນ ຄົບຮອບ 450 ປີ ໄດ້ຮີບໂຮມ ເອົາຈາກຫຼາຍໆ ຂໍ້ມູນທັງພາຍໃນ ແລະ ຕ່າງປະເທດ ຄື:

1. ປະຫວັດສາດ ລາວແຕ່ບູຮານເຖິງ ປີ 1946 ຂອງທ່ານ ມະຫາສີລາ ວິລະວົງ ນັກຄົ້ນຄວ້າ ແລະ ຂຽນ ປະຫວັດສາດ ທີ່ດີເດັ່ນຂອງລາວ.

2.. ປຶ້ມວ່າດ້ວຍອານາຈັກລາວລ້ານຊ້າງ ຂອງນັກປະຫວັດສາດ ຕ່າງປະເທດ ຈຳນວນ ໜຶ່ງ ເຊັ່ນ: ທ່ານ ວັນ ວຸດສະໂຕບ ແລະ ອື່ນໆ...

3. ນະຄອນຫລວງວຽງຈັນ ສະໄໝອານາຈັກລາວລ້ານຊ້າງ ເຫລັ້ມທີ 2 ຂອງທ່ານ ທົມ ມະກອນ ມະໂນທຳ.

4. ປຶ້ມເຫລັ້ມທີ 3 ນະຄອນຫລວງວຽງຈັນ ສະໄໝເປັນອານານິຄົມຂອງຝຣັ່ງເສດ ຂອງ ທ່ານ ທົມມະກອນ ມະໂນທຳ.

5. ປຶ້ມປະຫວັດສາດລາວ ສະໄໝອານາຈັກ ຫລວງພະບາງ; ອານາຈັກ ເມືອງ ພວນ; ອາ ນາຈັກວຽງຈັນ ແລະ ອານາຈັກ ຈຳປາສັກ ຂອງທ່ານ ເຫລື່ອມ ອິນສີຊ່ຽງໃໝ່.

6. ປຶ້ມປະຫວັດສາດລາດ ດຶກດຳບັນ ເຖິງປະຈຸບັນຂອງຄະນະ ໂຄສະນາອົບຮົມສູນກາງ ພັກ, ຊີ້ນຳໂດຍ ທ່ານ ພົນໂທ ໂອສະກັນ ທຳມະເທວາ.

7. ຖະແຫລງການຂອງ ເຈົ້າຄອງ ນະຄອນຫລວງວຽງຈັນ ວ່າດ້ວຍ ການສະເຫລີມສະ ຫລອງ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ.

8. ປຶ້ມບັນດາເຫດການປະຫວັດສາດຂອງລາວ ແຕ່ສະໄໝບູຮານ ເຖິງປີ 1975 ຂອງນັກ ປະຫວັດສາດ ຫງວຽນວັນຫງນ (ຫວຽດນາມ).

9. ປຶ້ມປະຫວັດສາດຂອງພັກ ປະຊາຊົນ ປະຕິວັດລາວ.

10. ເອກະສານ ຈາກປຶ້ມຄວາມເປັນມາຂອງຊາດລາວ ເຫລັ້ມທີ 1 ຂອງທ່ານ ບຸນມີ ເທບສີເມືອງ.

11. ປຶ້ມຊາດລາວ, ຄົນລາວ ອະດີດ ແລະ ປະຈຸບັນຂອງ ທ່ານ ດຣ ພູທອງ ແສງອາຄົມ.

12. ປຶ້ມປະຫວັດສາດ ແຫ່ງການຕໍ່ສູ້ປະຕິວັດ ໂດຍການຊຸມລວມໝູ່ຄະນະ ຂອງນັກ ຊຸມຫວຽດນາມ.

13. ປຶ້ມປະຫວັດສາດມູນເຊື້ອ ແຫ່ງການຕໍ່ສູ້ອັນພິລະອາດຫານ ແລະ ມີໄຊຂອງກອງ ທັບ ແລະ ປະຊາຊົນລາວ ພາຍໃຕ້ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ. ເຫລັ້ມທີ 1,2, 3, ຂອງກະຊວງປ້ອງກັນປະເທດ.

14. ບັນດາຂໍ້ມູນກໍ່ຄືບັນດາມະຕິ, ບັນດາບົດສະຫລຸບ ແລະ ທິດທາງແຜນການຂອງ ຄະ ນະອົງການປົກຄອງ ນະຄອນຫລວງວຽງຈັນ ແຕ່ລະໄລຍະ.

ການຄົ້ນຄວ້າ ແລະ ຊຸມ ແມ່ນບົນພື້ນຖານທັດສະນະ ປະຫວັດສາດບູຮານ ແລະ ທັດ ສະນະ ວິທະຍາສາດ ແຫ່ງຍຸກສະໄໝ, ບົນພື້ນຖານທັດສະນະຮອບດ້ານ, ຂະ ຫຍາຍຕົວໂລຍິກ ທີ່ສ່ອງແສງຄວາມເປັນຈິງ ທີ່ເກີດຂຶ້ນຢູ່ຂອບເຂດ ນະຄອນຫລວງວຽງຈັນ ໃນແຕ່ລະຍຸກແຕ່ລະ ສະໄໝຕິດພັນແໜ້ນກັບເຫດການ ປະຫວັດສາດລວມຂອງຊາດ ຂອງບັນດາຂະບວນການ ຕໍ່ສູ້

ຂອງຊາວວຽງຈັນ ແນໃສ່ເພື່ອໃຫ້ຄົນລາວທຸກຊົນເຜົ່າ ໃນປະຈຸບັນກໍ່ຄືຮຸ່ນຕໍ່ໆໄປ ຮັບຮູ້ແຈ້ງບັນດາເຫດການຄວາມເປັນມາຂອງຊາດລາວເວົ້າລວມ, ເວົ້າສະເພາະ ຂອງນະຄອນຫລວງວຽງຈັນ ຈຶ່ງໄດ້ມາຄົ້ຍຸກປະຈຸບັນແມ່ນດ້ວຍການຕໍ່ສູ້ຢ່າງທໍລະຫົດ, ອົດທົນ, ເດັດດ່ຽວໝຽວແໜ້ນ, ພົລະອາດຫານ, ໂດຍສະເພາະ ແມ່ນໄລຍະການຕໍ່ສູ້ ຕ້ານກັບການຮຸກຮານຢຶດຄອງຂອງສັກດິນາສະຫຍາມ ພາຍໃຕ້ການນໍາພາຂອງ ເຈົ້າ ຟ້າງຸ່ມ, ເຈົ້າ ໄຊເຊດຖາທິລາດ ແລະ ເຈົ້າ ອະນຸວົງ ກໍ່ຄືການຮຸກຮານຂອງລ່າເມືອງຂຶ້ນຝຣັ່ງ ແລະ ຈັກກະພັດອາເມລິກາ ພາຍໃຕ້ການ ນໍາພາຂອງພັກປະຊາຊົນ ປະຕິວັດລາວ, ຜູ້ສະຫລຽວສະຫລາດ, ອົງອາດກ້າແກ່ນ, ພັກທີ່ມີທິດສະດີ ວິທະຍາສາດ ແຫ່ງລັດທິມາກ - ເລນິນ ຊີ້ນໍາ, ນໍາພາຍາດໄດ້ໄຊຊະນະອັນສະຫງ່າງາມ.

ກ່ຽວກັບດ້ານເນື້ອໃນໂຄງຮ່າງຂອງປຶ້ມ.

ເນື້ອໃນປຶ້ມປະຫວັດສາດ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ ນີ້ໄດ້ຈັດແບ່ງເປັນ 5 ພາກໃຫຍ່. ໂດຍບໍ່ນັບພາກສະເໜີ ແລະ ພາກມ້ອນທ້າຍ.

ພາກທີໜຶ່ງ: ເມືອງວຽງຈັນ ກ່ອນປີ 1560 ຊຶ່ງພາກນີ້ໄດ້ເວົ້າເຖິງທີ່ຕັ້ງພູມສັນຖານ, ການປົກຄອງ, ປະຊາກອນ, ລັກສະນະຈຸດພິເສດດ້ານເສດຖະກິດ, ວັດທະນະທໍາ - ສັງຄົມ ຂອງ ເມືອງ ວຽງຈັນບູຮານ.

ພາກທີສອງ: ປະຫວັດສາດ ການເຕີບໃຫຍ່ຂອງເມືອງວຽງຈັນ ແຕ່ປີ 1560 - 1893 ຊຶ່ງເນື້ອໃນໄດ້ເວົ້າເຖິງການທ້ອນໂຮມສ້າງເມືອງວຽງຈັນ ພາຍໃຕ້ການນໍາພາຂອງບັນດາບັນພະບຸລຸດ; ເວົ້າເຖິງຂະບວນການຕໍ່ສູ້ ເພື່ອເອກະລາດອິດສະຫລະພາບ ຂອງປະຊາຊົນ ເມືອງວຽງຈັນ ຕ້ານການຮຸກຮານຂອງສັກດິນາພາຍນອກ.

ພາກທີສາມ: ຊາວນະຄອນຫລວງວຽງຈັນ ພ້ອມກັບທົ່ວປະເທດ ຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດລ່າເມືອງຂຶ້ນແບບເກົ່າຝຣັ່ງ ແຕ່ປີ 1893 - 1954.

ພາກທີສີ່: ຊາວນະຄອນຫລວງວຽງຈັນ ພ້ອມກັບທົ່ວປະເທດ ຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດລ່າເມືອງຂຶ້ນແບບໃໝ່ອາເມລິກາ ແຕ່ປີ 1954 - 1975.

ພາກທີຫ້າ: ນະຄອນຫລວງວຽງຈັນ ໃຕ້ການນໍາພາຂອງພັກ, ປະຕິບັດສອງໜ້າທີ່ຍຸດທະສາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ - ສັງຄົມ ແຕ່ປີ 1975 - 2010 ຊຶ່ງໃນພາກນີ້ ແບ່ງອອກເປັນ 3 ໄລຍະຄື:

- ໄລຍະທີ 1: ນັບແຕ່ປີ 1975 - 1986 ຊຶ່ງຊາວນະຄອນຫລວງວຽງຈັນ ໄດ້ດໍາເນີນສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສານະຄອນຫລວງວຽງຈັນ ໂດຍພາຍໃຕ້ການນໍາພາຂອງພັກຄະນະພັກ, ຄະນະປົກຄອງນະຄອນຫລວງວຽງຈັນ.

- ໄລຍະທີ 2: ນັບແຕ່ປີ 1987 - 2000 ຊາວນະຄອນຫລວງວຽງຈັນ ໄດ້ດຳເນີນການປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫລັກການຂອງພັກ.

- ໄລຍະທີ 3: ນັບແຕ່ປີ 2001 - 2010 ສືບຕໍ່ປະຕິບັດສອງໜ້າທີຍຸດທະສາດ ແລະ ຕີລາຄາການຈັດຕັ້ງປະຕິບັດຍຸດທະສາດ ການພັດທະນາເສດຖະກິດ - ສັງຄົມ ຂອງຊາວນະຄອນຫລວງວຽງຈັນຕາມແນວທາງປ່ຽນແປງໃໝ່ຂອງພັກ.

ການຂຽນປຶ້ມປະຫວັດສາດ ນະຄອນຫລວງ 450 ປີ ເທື່ອນີ້ເປັນເທື່ອທຳອິດ, ແນ່ນອນຈະບໍ່ປາສະຈາກໄດ້, ຂໍ້ຂາດຕົກບົກຜ່ອງ ແລະ ບໍ່ທັນຄົບຖ້ວນສົມບູນເທື່ອ. ແຕ່ກໍພໍເປັນຂໍ້ມູນຂ່າວສານອ້າງອີງໃຫ້ແກ່ນັກຮຽນຮູ້, ນັກສຶກສາ, ປັນຍາຊົນທີ່ມີຄວາມສົນໃຈ. ດັ່ງນັ້ນ, ຜ່ານການອ່ານຫາກເຫັນວ່າຈຸດໃດ ປະໂຫຍກໃດ ຄວາມເວົ້າອັນໃດບໍ່ແທດເໝາະຄົບຖ້ວນ ແລະ ບໍ່ຖືກຕ້ອງຂໍໃຫ້ຜູ້ ອ່ານປະກອບຄຳຄິດເຫັນຕື່ມ ພວກເຮົາຍັງຈະສືບຕໍ່ປັບປຸງຂຽນປຶ້ມເຫລັ້ມຕໍ່ໆໄປ.

ໃນນາມອະນຸກຳມະການທົບທວນ, ຮົບໂຮມ, ຂຽນປຶ້ມປະຫວັດສາດ ນະຄອນຫລວງວຽງຈັນ 450 ປີນີ້ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກຊຶ້ງຕໍ່ພັກ, ລັດ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ, ຜູ້ຊົງຄຸນອຸດທິກ່ຳຄີພະນັກງານ, ທະຫານ, ຕຳຫລວດ ຕະຫລອດຮອດພໍ່ແມ່ປະຊາຊົນ ຊາວນະຄອນຫລວງວຽງຈັນ ແລະ ປະຊາຊົນລາວບັນດາເຜົ່າ ທີ່ໄດ້ໃຫ້ການຮ່ວມໄມ້ຮ່ວມມືຊ່ວຍເຫລືອເປັນຢ່າງດີ ພ້ອມທັງໄດ້ປະກອບສ່ວນທາງດ້ານຂໍ້ມູນຂ່າວສານຕ່າງໆ, ອຳນວຍຄວາມສະດວກທຸກຢ່າງໃຫ້ ຄະນະພວກເຮົາຂຽນ ແລະ ຮຽບຮຽງ ປຶ້ມປະຫວັດສາດ ເຫລັ້ມນີ້ໄດ້ສຳເລັດຜົນເປັນຢ່າງດີ ຫວັງວ່າບັນດາທ່ານຜູ້ອ່ານ ຈະໃຫ້ການປະກອບສ່ວນຄວາມເຫັນໃນຂໍ້ ແລະ ຈຸດໃດທີ່ບໍ່ທັນຄົບຖ້ວນ ເພື່ອພວກເຮົາຈະໄດ້ປັບປຸງປຶ້ມເຫລັ້ມນີ້ ຕໍ່ໄປໃຫ້ຄົບຖ້ວນ ແລະ ສົມບູນຕື່ມອີກ.

ຂໍຂອບໃຈ

ວຽງຈັນ, ວັນທີ 01 ເດືອນ 05 ປີ 2010

ຫົວໜ້າຄະນະອະນຸກຳມະການ ທົບທວນ, ຮົ່ມໂຮມ ແລະ ຂຽນ ປະຫວັດສາດ ນະຄອນຫຼວງວຽງຈັນ ຄົບຮອບ 450 ປີ.

ຈັນສະໝອນ ຈັນຍາລາດ



ບັນດາທ່ານ ໃນຄະນະອະນຸກຳມະການ ທິບທອມ, ຮິບໂຮມ ແລະ ຊຸມ ປະຫວັດສາດ ນະຄອນຫລວງວຽງຈັນ 450 ປີ


ພາກສະເໜີ

ທີ່ຕັ້ງ, ພູມີປະເທດ ແລະ ສະພາບການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ ຂອງນະຄອນຫລວງວຽງຈັນ ໃນປັດຈຸບັນ.

I. ທີ່ຕັ້ງ, ພູມີປະເທດ ແລະ ປະຊາກອນ ນະຄອນຫລວງວຽງຈັນ.

1. ທີ່ຕັ້ງພູມສັນຖານນະຄອນຫລວງວຽງຈັນ.

ນະຄອນຫລວງວຽງຈັນ ຕັ້ງຢູ່ຕອນເໜືອ ຂອງພາກກາງ ແລະ ຕອນລຸ່ມ ຂອງພາກເໜືອ ຂອງ ສປປ ລາວ ນອນຢູ່ລະຫວ່າງເສັ້ນຂະໜານ 17° 45'50" ເຖິງ 18° 22'38" ເໜືອ ແລະ ລະຫວ່າງ ເສັ້ນແວງ 10° 205'40" ຫາ 10° 309'37" ຕາເວັນອອກ. ເນື້ອທີ່ທຳມະຊາດ ທັງໝົດມີ 3.920 ກມ^2 ກວມເອົາ 1,7% ຂອງເນື້ອທີ່ທົ່ວປະເທດ.



ພື້ນທີ່ທັງໝົດຂອງນະຄອນຫລວງວຽງຈັນ

ນະຄອນຫລວງວຽງຈັນ ມີຊາຍແດນຕິດກັບລາຊະອານາຈັກໄທ ຍາວປະມານ 165 ກມ, ທິດໃຕ້ຕິດກັບແຂວງ ໜອງຄາຍ (ປະເທດໄທ) ຂັ້ນດ້ວຍສາຍນ້ຳຂອງ, ທິດເໜືອ ມີຊາຍແດນ

ຕິດກັບ ເມືອງ ຊະນະຄາມ, ເມືອງ ໂພນໂຮງ, ເມືອງ ທຸລະຄົມ (ແຂວງ ວຽງຈັນ), ທິດຕາເວັນ ອອກ ແລະ ຕາເວັນອອກສ່ຽງໃຕ້ ຕິດກັບ ເມືອງ ທ່າພະບາດ (ແຂວງ ບໍລິຄຳໄຊ) ຍາວ 37ກມ.



ປ່າໄມ້ເຂດພູພະນັງ ເມືອງ ສັງທອງ ນະຄອນຫລວງວຽງຈັນ

ນະຄອນຫລວງວຽງຈັນ ນອນຢູ່ເຂດອາກາດຮ້ອນ ແລະ ອົບອຸ່ນ, ສະເລ່ຍອຸນຫະພູມ 26.4˚C ອຸນຫະພູມສູງສຸດ ໃນບາງປີ 41,5˚C ແລະ ຕ່ຳສຸດ 3.1˚C. ທຸກໆປີ ອາກາດຈະຮ້ອນແຮງ ຢູ່ລະ ຫວ່າງ ເດືອນ ມີນາ ຮອດ ເດືອນ ສິງຫາ ແລະ ໜາວສຸດ ໃນລະຫວ່າງ ເດືອນ ທັນວາ ຫາ ເດືອນ ມັງກອນ, ປະລິມານນ້ຳຝົນ ບໍ່ສະໜ່ຳສະເໝີ. ລະດູຝົນ ຝົນຈະຕົກຫຼາຍ ໃນລະຫວ່າງ 17-20 ວັນຕໍ່ເດືອນ, ປີຕົກຫຼາຍສຸດແທກໄດ້ 2179,6 ມີລີແມັດ ແລະ ປີຕົກໜ້ອຍສຸດແທກໄດ້ 1144,2 ມີລີແມັດ. ເນື່ອງຈາກເຂດ ນະຄອນຫລວງວຽງຈັນ ມີພື້ນທີ່ຮາບພຽງ ລຽບຕາມສາຍນ້ຳຂອງ ແລະ ມີສາຍນ້ຳອື່ນ ໄຫລຜ່ານອ້ອມເອົາທົ່ງພຽງ ທີ່ກວ້າງໃຫຍ່. ລະດູຮ້ອນມີຝົນກະທົບຈາກລົມ ມໍລະສຸມ ພັດຜ່ານປະເທດເຮົາ. ລະດູແລ້ງກໍ່ມັກເກີດມີລົມທ້ອງຖິ່ນ, ທິດລົມພັດຈາກທິດຕາ ເວັນຕົກ ເຂົ້າສູ່ທົ່ງພຽງ ໄປຫາຕາເວັນອອກ.

2. ການປົກຄອງ ແລະ ພົນລະເມືອງນະຄອນຫລວງວຽງຈັນ.

ນະຄອນຫລວງວຽງຈັນ ມີພົນລະເມືອງ 659.243 ຄົນ, ປີ 2010 ຍິງ 364.273 ຄົນ. ກວມ “ ເອົາ 12% ຂອງພົນລະເມືອງທົ່ວປະເທດ, ຄວາມໜາແໜ້ນກວມເອົາອັດຕາສ່ວນ 163

ຄົນ/ກມ^2. ການແຈກຢາຍຂອງ ພົນລະເມືອງ ໃນນະຄອນຫລວງວຽງຈັນ ມີລັກສະນະບໍ່ສະໝໍ່າສະເໝີ, ຄວາມໜາແໜ້ນຂອງພົນລະເມືອງ ຢູ່ເຂດຊານເມືອງ ຕ່ຳກວ່າເຂດກາງເມືອງ ເຊັ່ນ: ເຂດເມືອງ ສັງທອງ ມີພຽງ 37 ຄົນ/ກມ^2, ເມືອງ ນາຊາຍທອງ ມີ 49 ຄົນ/ກມ^2, ແຕ່ໃນເຂດເທດສະບານ ຊ້ຳພັດໜາແໜ້ນກວ່າ ເຊັ່ນ: ເມືອງ ຈັນທະບູລີ ມີເຖິງ 2.252 ຄົນ/ກມ^2.

ປະຈຸບັນໄດ້ແບ່ງ ນະຄອນຫລວງວຽງຈັນ ອອກເປັນ 9 ເມືອງ ຊຶ່ງມີເນື້ອທີ່, ການປົກຄອງ ແລະ ພົນລະເມືອງແຕ່ລະເມືອງ ດັ່ງລຸ່ມນີ້:

ລ/ດ	ຊື່ເມືອງ	ຈຳນວນ ບ້ານ	ເນື້ອທີ່ (ກມ^2)	ພົນລະເມືອງ (ຄົນ)	ສະເລ່ຍຄວາມ ໜາແໜ້ນ ຄົນ/ກມ^2
1.	ເມືອງ ຈັນທະບູລີ	37	29	75.307	22.526
2.	ເມືອງ ສີໂຄດຕະບອງ	60	140	95.761	670
3.	ເມືອງ ໄຊເສດຖາ	81	147	89.661	596
4.	ເມືອງ ນາຊາຍທອງ	56	1131	54.948	148
5.	ເມືອງ ສີສັດຕະນາກ	40	31	63.550	2.018
6.	ເມືອງ ໄຊທານີ	104	916	135.529	284
7.	ເມືອງ ຫາດຊາຍຟອງ	58	258	73.233	284
8.	ເມືອງ ສັງທອງ	37	622	22.764	37
9.	ເມືອງ ປາກງື່ມ	53	646	43.460	67
	ລວມ	**496**	**3.920**	**659.243**	**163**

ໃນນັ້ນເມືອງ ນາຊາຍທອງ ເປັນເມືອງທີ່ມີເນື້ອທີ່ກວ້າງກວ່າບັນດາເມືອງອື່ນໆ. ນະຄອນຫລວງວຽງຈັນ ແບ່ງອອກເປັນ 496 ບ້ານ, ໃນນັ້ນຢູ່ໃນເຂດໃຈກາງ ກວມເອົາ 63% ຂອງຈຳນວນບ້ານທັງໝົດ, ຢູ່ເຂດຊົນນະບົດ ມີພຽງ 37%; ປະຊາຊົນ ນະຄອນຫຼວງວຽງຈັນ ມີນ້ຳໃຈຈຸໝັ້ນຂະຫຍັນພຽນ, ມີມູນເຊື້ອຮັກຊາດ, ມີນ້ຳໃຈປະຕິວັດອົງອາດກ້າຫານ, 90% ແມ່ນມີອາຊີບເຮັດນາ ແລະ ຄ້າຂາຍ, ມີຮີດຄອງປະເພນີ ນັບຖືສາສະໜາພຸດ ເປັນສ່ວນຫລາຍ, ທົ່ວນະຄອນຫລວງວຽງຈັນ ໄດ້ຮັບການລົບລ້າງ ຄວາມບໍ່ຮູ້ໜັງສື ໄດ້ 100% ໃນປີ 1978, ພຽງ 3 ປີ ຫຼັງຈາກປົດປ່ອຍທົ່ວປະເທດ.


ປະເທດ
ສ.ປ ຈີນ
ປະເທດ
ສະຫະພາບມຽນມາ
ປະເທດ
ສ.ສ ຫວຽດນາມ
ປະເທດ
ລາຊະອານາຈັກໄທ
ປະເທດ
ລາຊະອານາຈັກກຳປູເຈຍ
ນະຄອນຫຼວງວຽງຈັນ
ບໍ່ແກ້ວ
Bokeo
ຫົວພັນ
Huaphan
ໄຊຍະບູລີ
ວຽງຈັນ
Vientiane
ບໍລິຄຳໄຊ
Bolikhamxai
ຄຳມ່ວນ
Khammouan
ສະຫວັນນະເຂດ
Savannakhet
ສາລະວັນ
Salavan
ຈຳປາສັກ
Champasak
ອັດຕະປື
Attapeu

3. ປະຊາຊົນບັນດາຊົນເຜົ່າ ໃນນະຄອນຫລວງວຽງຈັນ.

ຍ້ອນຈຸດພິເສດ ທີ່ເປັນ ນະຄອນຫລວງ ຂອງປະເທດ, ເປັນສູນກາງເຕົ້າໂຮມ ປະຊາຊົນ ທັງແມ່ນສູນລວມ ທາງດ້ານ ວັດທະນະທຳ - ສັງຄົມ ຈຶ່ງເຮັດໃຫ້ເງື່ອນໄຂໃນການເຕົ້າໂຮມຂອງ ປະຊາຊົນ ຢູ່ໃນ ນະຄອນຫລວງວຽງຈັນ ມີຫຼາຍເຜົ່າຊົນ ແລະ ມີຮີດຄອງປະເພນີ ບໍ່ຄ້າຍກັນ, ໂດຍທົ່ວໄປ ໃນນະຄອນຫລວງວຽງຈັນ ມີເກືອບຄົບ 49 ຊົນເຜົ່າ ຊຶ່ງຈັດຕາມ 4 ໝວດພາສາ ດັ່ງລຸ່ມນີ້:



ຊົນເຜົ່າລາວ



ຊົນເຜົ່າໄຕ




ຊົນເຜົ່າຢ້ຽ

ກ. ລາວ - ໄຕ ມີ 8 ຊົນເຜົ່າ:

1. ຊົນເຜົ່າ ລາວ
2. ຊົນເຜົ່າ ໄຕ
3. ຊົນເຜົ່າ ຜູ້ໄທ
4. ຊົນເຜົ່າ ລື້
5. ຊົນເຜົ່າ ຍວນ
6. ຊົນເຜົ່າ ຢ້ັງ
7. ຊົນເຜົ່າ ແຊກ
8. ຊົນເຜົ່າ ໄທເໜືອ

ຂ. ມອນ - ຂະແມຂອມ ມີ 32 ຊົນເຜົ່າ.

1. ຊົນເຜົ່າ ກືມມຸ (ຂະມຸ)
2. ຊົນເຜົ່າ ໄປຣ
3. ຊົນເຜົ່າ ຊິ້ງມູນ
4. ຊົນເຜົ່າ ຜ້ອງ
5. ຊົນເຜົ່າ ແທ່ນ
6. ຊົນເຜົ່າ ເອີດູ
7. ຊົນເຜົ່າ ບິດ
8. ຊົນເຜົ່າ ລະເມດ
9. ຊົນເຜົ່າ ສາມຕາວ
10. ຊົນເຜົ່າ ກະຕາງ
11. ຊົນເຜົ່າ ມະກອງ
12. ຊົນເຜົ່າ ຕຣີ
13. ຊົນເຜົ່າ ຢຣຸ



ຊິ້ນເຜົ່າກຶມມຸ



ຊິ້ນເຜົ່າມ້ຽ



ຊິ້ນເຜົ່າຮາຍີ

14. ຊິ້ນເຜົ່າ ຕຣຽ
15. ຊິ້ນເຜົ່າ ຕະໂອ້ຍ
16. ຊິ້ນເຜົ່າ ແຢະ
17. ຊິ້ນເຜົ່າ ເບຣິ
18. ຊິ້ນເຜົ່າ ກະຕູ
19. ຊິ້ນເຜົ່າ ຮາຮັກ
20. ຊິ້ນເຜົ່າ ໂອຍ
21. ຊິ້ນເຜົ່າ ກຣຽ
22. ຊິ້ນເຜົ່າ ເຈັ
23. ຊິ້ນເຜົ່າ ສະດາ
24. ຊິ້ນເຜົ່າ ຊ່ວຍ
25. ຊິ້ນເຜົ່າ ຍະເຫີນ
26. ຊິ້ນເຜົ່າ ລະວີ
27. ຊິ້ນເຜົ່າ ປະໂກະ
28. ຊິ້ນເຜົ່າ ຂະແມ
29. ຊິ້ນເຜົ່າ ຕຸ້ມ
30. ຊິ້ນເຜົ່າ ໆວນ
31. ຊິ້ນເຜົ່າ ມ້ອຍ
32. ຊິ້ນເຜົ່າ ກຣິ.

ຄ. ມ້ຽ - ອີ້ວມຽນ ມີ 2 ຊິ້ນເຜົ່າ.

1. ຊິ້ນເຜົ່າມ້ຽ
2. ຊິ້ນເຜົ່າ ອີ້ວມຽນ

ງ. ເຜົ່າທີ່ນຳໃຊ້ພາສາຈີນ - ຕິເບດ ມີ 7 ເຜົ່າ:

1. ຊິ້ນເຜົ່າ ອາຄາ
2. ຊິ້ນເຜົ່າ ຜູ້ນ້ອຍ
3. ຊິ້ນເຜົ່າ ລາຫູ
4. ຊິ້ນເຜົ່າ ລາສີ
5. ຊິ້ນເຜົ່າ ຮາຍີ
6. ຊິ້ນເຜົ່າ ໂລໂລ
7. ຊິ້ນເຜົ່າຫໍ້



ຄວາມສາມັກຄີຮັກແພງລະຫວ່າງເຜົ່າ

ທັງໝົດ 49 ເຜົ່າຊົນເໝືອນກັບໃນທົ່ວປະເທດ, ສະຫລັບສັບກັນຢູ່ໃນທົ່ວຂົງເຂດນະຄອນຫລວງວຽງຈັນ ແລະ ໃນ 9 ເມືອງ.

II. ສະພາບດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມຂອງ ນະຄອນຫລວງວຽງຈັນ.

1. ນະຄອນຫຼວງວຽງຈັນ ເປັນໝາກຫົວໃຈສຳຄັນ, ທັງເປັນສູນກາງທາງດ້ານການເມືອງ, ການປົກຄອງແຫ່ງຊາດ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເປັນສູນກາງທາງດ້ານວັດທະນະທຳ - ສັງຄົມ ແລະ ວິທະຍາສາດ, ທັງມີບັນດາສະຖາບັນ ການສຶກສາ ແຫ່ງຊາດ, ສະຖາບັນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການພົວພັນດ້ານການຄ້າ, ການບໍລິການ, ການຕ່າງປະເທດ ແລະ ອື່ນໆ.

2. ດ້ານເສດຖະກິດ, ນະຄອນຫລວງວຽງຈັນ ມີພື້ນຖານອຸດສະຫະກຳ ແລະ ຫັດຖະກຳທີ່ມີການຂະຫຍາຍຕົວ ແຂງແຮງຂອງປະເທດ; ເປັນໃຈກາງການທ່ອງທ່ຽວ ແລະ ການບໍລິການທີ່ທັນສະໄໝສົມຄວນ, ມີໂຄງລ່າງພື້ນຖານ ຊົນລະປະທານອັນຖາວອນ, ມີບັນດາສູນການຜະລິດແນວພັນພືດ ແລະ ແນວພັນສັດທີ່ທັນສະໄໝ; ມີຊັບພະຍາກອນ ທຳມະຊາດ ທີ່ອຸດົມສົມບູນ ແລະ ມີລາຄາແພງເຊັ່ນ:

- ນະຄອນຫລວງວຽງຈັນ ມີເນື້ອທີ່ປ່າໄມ້ ທັງໝົດ 105.168,00 ຮຕ ແລະ ໄດ້ແບ່ງເປັນ ເຂດແຕກຕ່າງກັນ ຄື: ເຂດປ່າສະຫງວນ ມີ 18 ແຫ່ງ ມີເນື້ອທີ່ 57.584 ຮຕ; ເຂດພູດອຍ ກວມ ເອົາເນື້ອທີ 53.554 ຮຕ ແລະ ເຂດທົ່ງພຽງ ມີ 3729.44 ຮຕ. ປ່າໄມ້ເຂດນະຄອນຫລວງວຽງ ຈັນ ລວມມີໄມ້ນາໆຊະນິດ ເປັນຕົ້ນແມ່ນໄມ້ເນື້ອແຂງ ເຊັ່ນ: ໄມ້ດູ່, ໄມ້ແຄນ, ໄມ້ຄະຍຸງ, ໄມ້ ສະທ້ອນ... ນອກນັ້ນ ຍັງມີພືດພັນ ທີ່ໃຊ້ເປັນຢາສະໝຸນໄພ, ມີສັດປ່າຫລາຍຊະນິດ ຄື: ຊ້າງ, ເສືອ, ລີ, ຄ່າງ, ກວາງ, ຟານ... ຢູ່ຕາມພູສູງ ເຊັ່ນ: ພູເຂົາຄວາຍ 1.100 m, ພູພະນັງ 870 m.

- ທາງດ້ານທໍລະນີສາດ - ບໍ່ແຮ່, ອີງຕາມການສຳຫລວດໃນນະຄອນຫລວງວຽງຈັນ ເພີ່ນ ໄດ້ຄົ້ນເຫັນບໍ່ແຮ່ທາດ ທີ່ສຳຄັນຫລາຍຊະນິດ ເຊັ່ນ: ບໍ່ດິນໜຽວ ຢູ່ເຂດບ້ານ ດຸ່ງ; ເມືອງ ໄຊເສດ ຖາ, ບ້ານ ໜອງແຫ້ວ; ເມືອງ ຫາດຊາຍຟອງ; ຫາດຊາຍແກ້ວ ຢູ່ເຂດ ບ້ານ ອີໄລ; ເມືອງ ນາ ຊາຍທອງ, ຫາດດອນຈັນ; ເມືອງ ສີສັດຕະນາກ, ບໍ່ຖ່ານຫີນ (ປະເພດ ລິກໄນ ຫຼື ລີຢິດ Lignite) ທີ່ນຳຄວາມຮ້ອນສູງເຂດນ້ຳສັງ - ນ້ຳຕອນ ເມືອງ ນາຊາຍທອງ, ບ້ານ ໜາກນາວ ເມືອງ ຫາດ ຊາຍຟອງ; ບໍ່ເຫລັກ ເຂດບ້ານ ອ່າງ, ເມືອງ ນາຊາຍທອງ; ບໍ່ເກືອ (Potassium) ແລະ ເກືອ ກິນ ທີ່ທົ່ງຮາບວຽງຈັນຕອນໃຕ້, ປະຈຸບັນເພີ່ນໄດ້ນຳມາຜະລິດເປັນເກືອກິນ ແລະ ເກືອກະລີຝຸ່ນ ວິທະຍາສາດອື່ນໆ ຮັບໃຊ້ການກະສິກຳໄດ້ ເຊັ່ນ: ບໍ່ເກືອໂຄກສະອາດ.

- ດ້ານຄົມມະນາຄົມ, ນະຄອນຫລວງວຽງຈັນ ມີເສັ້ນທາງຍຸດທະສາດ ອາຊີ - ອາຄະເນ ເລກ 13 ຜ່ານແຕ່ເໜືອເຖິງໃຕ້, ມີເສັ້ນທາງບິກ ຕັດຜ່ານ ລະຫວ່າງເມືອງຕໍ່ເມືອງ ທີ່ໄດ້ຮັບການ ພັດທະນາດີຂຶ້ນເລື້ອຍໆ, ມີເສັ້ນທາງການບິນ ແລະ ມີເດີ່ນບິນ ສາມາດຮອງຮັບການໂດຍສານ ຂະໜາດໃຫຍ່ທຽບເທົ່າກັບສາກົນ. ມີເສັ້ນທາງນ້ຳທີ່ສຳຄັນ ຄື: ນ້ຳຂອງ, ນ້ຳງຶ່ມ ທັງເປັນແຫລ່ງ ທຳມາຫາກິນຂອງ ປະຊາຊົນບັນດາເຜົ່າມາແຕ່ເດີມ. ດ້ວຍທີ່ຕັ້ງສຳຄັນ ດັ່ງກ່າວ ຈຶ່ງເຮັດໃຫ້ການ ຄົມມະນາຄົມຂອງ ນະຄອນຫລວງວຽງຈັນ ໄປສູ່ແຫ່ງອື່ນໆ ທັງພາຍໃນ ແລະ ຕ່າງປະເທດ ໄດ້ ຮັບຄວາມສະດວກຂຶ້ນຫຼາຍ, ທັງເປັນປ້ອມດ່ານໜ້າ ແລະ ເປັນເງື່ອນໄຂສຳຄັນ ໃຫ້ແກ່ການກໍ່ ສ້າງເມືອງຫລວງວຽງຈັນ ໃຫ້ກາຍເປັນ ***"ນະຄອນຫລວງແຫ່ງຊາດ"*** ຕັ້ງຢູ່ໃນບໍລິເວນທົ່ງພຽງ ອັນກວ້າງໃຫຍ່ອຸດົມສົມບູນ ຂອງປະເທດຢ່າງສົມກຽດ.

3. ດ້ານວັດທະນະທຳ, ສັງຄົມ, ສາສະໜາ, ຮີດຄອງປະເພນີ. ຍ້ອນທີ່ຕັ້ງ ນະຄອນຫລວງ ວຽງຈັນ. ເປັນໃຈກາງຂອງປະເທດຊາດ ມີລັກສະນະລວມສູນ ແລະ ໄດ້ແບ່ງອອກເປັນເຂດຢ່າງ ຈະແຈ້ງ ເຊັ່ນ: ມີ 4 ຕົວເມືອງ ເຕົ້າໂຮມກັນຢູ່ເຂດໃຈກາງ ແລະ ມີ 5 ເມືອງ ຈັດຢູ່ອ້ອມຮອບນະ ຄອນ, ເຖິງວ່າຈະມີຊາຍແດນຕິດຈອດກັນ ແຕ່ຄວາມໜາແໜ້ນຂອງພົນລະເມືອງ ແມ່ນຍັງຢູ່ ກະແຈກກະຈາຍ, ເຮັດໃຫ້ການດຳລົງຊີວິດ, ວັດທະນະທຳ - ສັງຄົມ ແລະ ຮີດຄອງປະເພນີໃນ ນະຄອນຫລວງ ມີຫຼາຍດ້ານແຕກຕ່າງກັນ ແລະ ຄ້າຍຄືກັນ, ກ່ຽວກັບເຂດໃຈກາງຕົວເມືອງແມ່ນ

ເຂດທີ່ຮັບເອົາຫລາຍແຫລ່ງຫລາຍກະແສວັດທະນະທຳ, ສັງຄົມ, ຮີດຄອງປະເພນີຂອງບັນດາ ເຜົ່າຊົນໃນຂອບເຂດທົ່ວປະເທດ ແລະ ນັບທັງສາກົນອີກດ້ວຍ ເປັນຕົ້ນ ແມ່ນບັນດາປະເທດ ໃກ້ຄຽງ. ເນື່ອງຈາກວ່າ ນະຄອນຫລວງວຽງຈັນ, ມີປະຊາກອນເຄື່ອນຍ້າຍເຂົ້າມາດຳລົງຊີວິດຢູ່ ຢ່າງໜາແໜ້ນ, ນຳເອົາວັດທະນະທຳ - ສັງຄົມ ທີ່ມີຫລາຍສີສັນ, ມີຮີດຄອງປະເພນີ, ຄວາມ ເຊື່ອຖືຂອງທ້ອງຖິ່ນໃຜມັນ ເຂົ້າມາສະຫລັບສັບຊ້ອນປົນເປກັນລະຫວ່າງ ປະຊາຊົນບັນດາເຜົ່າ ແລະ ບັນດາຊັ້ນຄົນຕາມທຳມະຊາດຂອງນະຄອນຫລວງຂອງທຸກໆ ປະເທດໃນໂລກ. ຊຶ່ງໄດ້ນຳ ເອົາຜົນສະທ້ອນ, ເງື່ອນໄຂຕ່າງໆ ຈາກລະບົບການສື່ສານທີ່ທັນສະໄໝ, ດ້ານໜຶ່ງໃນສະໄໝ ພວກລ່າເມືອງຂຶ້ນປົກຄອງລາວ, ພວກເຂົາກໍ່ໄດ້ນຳເອົາວັດທະນະທຳຕາເວັນຕົກ ເຂົ້າມາສັບປົນ ຫວັງຈະປ່ຽນແປງຮີດຄອງວັດທະນະທຳຂອງຊາດລາວ ໃຫ້ສູນເສຍຄວາມເປັນເອກະລາດແຫ່ງ ຊາດ ແລະ ດ້ານໜຶ່ງອີກ ກໍ່ຍ້ອນລະບົບການສື່ສານມີຄວາມກ້າວໜ້າ, ທັງເຕັກໂນໂລຊີກໍ່ທັນສະ ໄໝກວ່າເຂດຊົນນະບົດ ມັນຈຶ່ງໄດ້ສ້າງໃຫ້ປະຊາຊົນເຮົາ ມີສີສັນລັກສະນະທຳມະຊາດຂອງຍຸກ ສະໄໝ ເຊັ່ນ: ຄາວກ່ອນຍິງສາວລາວແມ່ນນຸ່ງສິ້ນ, ເກົ້າຜົມຮັກສາຮີດຄອງປະເພນີໄດ້ ເປັນຢ່າງ ດີ, ແຕ່ໃນສະໄໝນີ້ສ້າງຄອບຄົວ ຫລື ປະຮ້າງກໍ່ຈັດຂຶ້ນງ່າຍດາຍ ຊຶ່ງບໍ່ເປັນໄປຕາມຮີດ 12 ຄອງ 14 ຊຶ່ງແມ່ນປະເພນີ ດັ້ງເດີມຂອງເຊື້ອຊາດລາວ.

ສຳລັບເຂດຊົນນະບົດ ການເຊື່ອຖືຮີດຄອງປະເພນີ, ວັດທະນະທຳ - ສັງຄົມ ຂອງພື້ນ ເມືອງ ທີ່ເປັນປະເພນີສືບທອດກັນມາ ແຕ່ບູຮານນະການ ກໍ່ຍັງບໍ່ມີການປ່ຽນແປງຫຼາຍເທື່ອ. ປະ ຊາຊົນ ສ່ວນໃຫຍ່ກໍ່ຍັງນັບຖືສາສະໜາພຸດເປັນຫຼັກ, ນອກນັ້ນກໍ່ນັບຖືສາສະໜາອື່ນໆ ກໍ່ມີຊຶ່ງ ແມ່ນຜົນສະທ້ອນ ຈາກການນຳເຂົ້າຂອງພວກຕາເວັນຕົກເປັນສ່ວນໃຫຍ່, ຍ້ອນແນວນັ້ນຈຶ່ງເຮັດ ໃຫ້ລັກສະນະວັດທະນະທຳ, ຮີດຄອງປະເພນີມີດ້ານປົນເປກັນຢ່າງສະຫລັບສັບຊ້ອນ, ການນຸ່ງ ຖືແຕ່ງໂຕກໍ່ມີຫລາຍຮູບຫລາຍສີ, ຂະນົບທຳນຽມເຄົາລົບນັບຖືພໍ່ແມ່, ຄູບາອາຈານ, ຜູ້ຊົງຄຸນ ວຸດທິທີ່ມີລັກສະນະຊາດ ແທ້ກໍ່ຄ່ອຍໆ ຈືດຈາງໄປ.

ເຖິງຢ່າງໃດກໍ່ດີ, ເຖິງວ່າ ວັດທະນະທຳ - ສັງຄົມ ໃນນະຄອນຫລວງວຽງຈັນ ຈະມີດ້ານ ແຕກຕ່າງ ສະຫລັບສັບຊ້ອນກັນກໍ່ຕາມ, ແຕ່ປະຊາຊົນ ເຊື້ອຊາດລາວ ບັນດາເຜົ່າ ລ້ວນແຕ່ມີ ຈຸດພິເສດ, ມີເອກະລັກຈຳເພາະຂອງຕົນເປັນຕົ້ນມາ ຄື: ການປະຕິບັດ ຮີດສິບສອງ ຄອງສິບສີ່ ຮີດຍີ່ ຄອງຈຽງ ທີ່ບັນພະບູລຸດ ໄດ້ປະຕິບັດກັນມານານ ນັບໄດ້ຫລາຍຮ້ອຍປີແລ້ວ ກໍ່ຍັງແມ່ນ ພື້ນຖານ ແນວຄິດຈິດໃຈຂອງຄົນລາວ. ປະຈຸບັນ ນະຄອນຫລວງວຽງຈັນ ປະກອບມີບັນດາສາ ສະໜາ ສຳຄັນດັ່ງນີ້:

- ສາສະໜາພຸດ ເປັນສ່ວນໃຫຍ່, ອາດກວມເອົາຮອດ 89 % ; ນອກນັ້ນກໍ່ມີ ສາສະໜາ ເຍຊູ ນິກາຍຕ່າງໆ, ສາສະໜາອິດສະລາມ ຫລື ມຸສະລິມ, ສາສະໜາບາຮາຍ ແລະ ອື່ນໆ...

ໃນສະໄໝຕໍ່ສູ້ກູ້ຊາດ ຕ້ານການຮຸກຮານຂອງພາຍນອກ, ສັດຕູໄດ້ສວຍໃຊ້ບັນດາລັກສະນະຂອງສາສະໜາ, ທີ່ມີຈຸດແຕກຕ່າງກັນນີ້ ເພື່ອແບ່ງແຍກຄວາມສາມັກຄີຂອງ ປະຊາຊົນບັນດາເຜົ່າພວກເຮົາ, ແບ່ງແຍກເຊື້ອຊາດລາວ ກັບເຊື້ອຊາດ ອື່ນໆ ແນໃສ່ເພື່ອຮຸກຮານ ແລະ ຄອບຄອງຜືນແຜ່ນດິນ ອັນອຸດົມຮັ່ງມີຂອງລາວ. ພວກເຂົາໄດ້ນຳເອົາ ລະບອບກົດຂີ່ຂູດຮີດມາຂົ່ມເຫັງ ປະຊາຊົນ ຊາວຜູ້ອອກແຮງງານຢ່າງໜັກ ຈົນກ້າວໄປເຖິງການຕໍ່ສູ້ຍາດຊິງຊັບສົມບັດ ແລະ ສິງຄາມ ປະຫັດປະຫານ ກັນລະຫວ່າງລາວ ຕໍ່ລາວເຮົາເອງ.


ຈຸດເດັ່ນຂອງຮີດຄອງປະເພນີ, ວັດທະນະທຳ ຂອງຊາວວຽງຈັນ, ໃນປີ 1560 ເຈົ້າ ໄຊເຊດຖາທິລາດ ໄດ້ຍົກເອົາ ນະຄອນຫລວງວຽງຈັນນີ້ ເປັນລາຊະທານີ ຂອງໝົດອານາຈັກລ້ານຊ້າງ. ພະອົງໄດ້ນຳພາ ປະຊາຊົນ ສ້າງຕັ້ງ ຫໍພະແກ້ວ ແລະ ພະທາດຫລວງຂຶ້ນ ອັນເປັນທີ່ເຄົາລົບສັກກະຣະບູຊາ ຂອງຄົນລາວ ສືບເນື່ອງກັນມາຈົນເຖິງທຸກວັນນີ້; ນອກຈາກນັ້ນ ຢູ່ບັນດາຕົວເມືອງນ້ອຍໃຫຍ່ໃນ ວຽງຈັນ ກໍ່ໄດ້ສ້າງບັນດາພະທາດນ້ອຍ, ສ້າງວັດວາອາຮາມຫລາຍແຫ່ງຂຶ້ນ ເພື່ອເປັນສູນກາງ ໃນການເຕົ້າໂຮມແນວຄິດຈິດໃຈ ຂອງປະຊາຊົນ ຊາວຜູ້ອອກແຮງງານໃນ ວຽງຈັນ ກໍ່ຄືທົ່ວປະເທດ ຊຶ່ງທຸກໆປີ ເມື່ອເຖິງ ເດືອນ 12 ເພັງ ເພິ່ນມີການຈັດຕັ້ງບຸນ ສະເຫລີມສະຫລອງ ພະທາດຫລວງ ວຽງຈັນ ອັນເປັນໝາກຜົນ ແຫ່ງການເຕົ້າໂຮມຄວາມສາມັກຄີພາຍໃນຊາດຂຶ້ນ ຈົນກາຍເປັນປະເພນີໜຶ່ງ ທີ່ໃຫຍ່ໂຕ ເຖິງທຸກວັນນີ້.



ຫໍພິພິທະພັນແຫ່ງຊາດ.



ຫໍພິພິທະພັນ ປະຫວັດສາດ ການຕໍ່ສູ້ ປະຊາຊົນລາວ



ຫໍພິພິທະພັນ ປະທານ ໄກສອນ ພົມວິຫານ

ນະຄອນຫລວງວຽງຈັນ

450 ປີ


ພາກທີໜຶ່ງ

ປະຫວັດສາດ ປະເທດລາວ ໂດຍຫຍໍ້
ແລະ ຄວາມເປັນມາຂອງຊື່ສຽງ ເມືອງວຽງຈັນ

I. ປະຫວັດສາດຂອງເມືອງວຽງຈັນ ກ່ອນປີ 1560

1. ປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປັດຈຸບັນ ຫຼື ປະເທດລາວລ້ານຊ້າງ ໃນເມື່ອກ່ອນ.


ປະເທດລາວ ຕັ້ງຢູ່ໃນຜືນແຜ່ນດິນ ທີ່ເອີ້ນວ່າ " ອາຊີອາຄະເນ " ຫລື ໃນປາງບູຮານ ເອີ້ນວ່າ " ສຸວັນນະພູມປະເທດ " ມີເຂດແດນ: ທາງເໜືອ ຕິດກັບປະເທດຈີນ; ທາງຕາເວັນຕົກ ສ່ຽງເໜືອ ຕິດກັບແຄ້ວ ອັດສຳຂອງອິນເດຍ; ດ້ານຕາເວັນອອກ ແລະ ໃຕ້ຕິດກັບທະເລຈີນໃຕ້; ດ້ານຕາເວັນຕົກ ຕິດກັບອ່າວ ເບັ້ງກອນ ແລະ ທະເລ ອັນດາມັນ.



ເຄື່ອງປັ້ນດິນເຜົາ ທີ່ຄົ້ນພົບຢູ່ ບ້ານຊຽງ, ແຂວງ ອຸດອນ (ປະເທດໄທໃນປະຈຸບັນ) .

ໃນອາຊີອາຄະເນທີ່ລວມມີປະເທດພະມ້າ (ມຽນມາ), ລາຊະອານາຈັກໄທ, ມາເລເຊຍ, ກຳປູເຈຍ, ສປປ ລາວ ແລະ ສ.ສ ຫວຽດນາມ, ຟີລິບປິນ, ສິງກະໂປ ແລະ ອິນໂດເນເຊຍ. ແມ່ນ້ຳສຳຄັນໃນຂົງເຂດນີ້ມີແມ່ນ້ຳອີຣາວະດີ ແລະ ແມ່ນ້ຳສາລະວິນ ຢູ່ໃນປະເທດມຽນມາ; ແມ່ນ້ຳຂອງຢູ່ໃນປະເທດລາວ,ໄທ, ກຳປູເຈຍ ແລະ ຫວຽດນາມຕອນໃຕ້; ແມ່ນ້ຳເຈົ້າພະຍາໃນປະເທດໄທ, ແມ່ນ້ຳແດງໃນຫວຽດນາມ.

ແຫລມສຸວັນນະພູມ ແຫ່ງນີ້ ໄດ້ມີມະນຸດຊາດເຂົ້າມາດຳລົງຊີວິດຢູ່ແລ້ວ ຕັ້ງຫລາຍແສນປີ. ນັກຄົ້ນຄວ້າໄດ້ແຈ້ງໃຫ້ຮູ້ວ່າ: ເອຊີອາຄະເນເຄີຍເປັນທາງຜ່ານລະຫວ່າງມະນຸດ ຊະວາ ແລະ ມະນຸດປັກກິ່ງ. ເຜົ່າພັນມະນຸດ ທີ່ເຄື່ອນຍ້າຍເຂົ້າມາອາໄສໃນເຂດນີ້ ມີຫລາຍເຜົ່າຊົນ ເພາະວ່າ ຢູ່ຖ້ຳຮາງ ແລະ ຖ້ຳພູເລີຍຂອງລາວເຮົາ ໄດ້ຂຸດພົບເຄື່ອງມືຫີນຕ່ອຍ, ແຂ້ວ ແລະ ປົ້ງກະດູກຂະມັບຂ້າຍຂອງຄົນບູຮານ ຊຶ່ງເປັນກະດູກປະເພດດຽວກັນກັບມະນຸດຊະວາ ແລະ ມະນຸດປັກກິ່ງ, ຊຶ່ງສະແດງວ່າ ດິນແດນລາວໄດ້ມີມະນຸດ ແລະ ກໍເປັນທາງຜ່ານທາງດ້ານ ວັດທະນະທຳຂອງມະນຸດ ທີ່ມີຄວາມຈະເລີນມາດົນນານແລ້ວ.



ຮູບແຕ້ມມະນຸດ ພູເລີຍ ອາຍຸປະມານ 4 - 5 ແສນປີ ,
ແຕ້ມຂຶ້ນຕາມຈິນຕະນາການ ຂອງນັກວິຊາການ ໃນຍຸກປະຈຸບັນ.

ນັກຄົ້ນຄວ້າທາງດ້ານ ມະນຸດວິທະຍາ ໄດ້ລົງຄວາມເຫັນວ່າ: ມະນຸດຊາດ ທີ່ມີຢູ່ໃນຂົງເຂດນີ້ ແຕ່ເດີມອາດມາແຕ່ເຊື້ອຊາດຊະວາ ເປັນສ່ວນໃຫ່ຍ ຊຶ່ງເປັນຕົ້ນຕະກຸນ ຂອງເຜົ່າມະເລ (ມາລະຢູ) ແລະ ອິນໂດເນເຊຍ. ສ່ວນເຊື້ອຊາດລະວ້າ ຫລື " ອ້າຍລາວ " ອາດເປັນຕົ້ນຕະກຸນ ຂອງລາວ ຫລື ໄຕ - ລາວ ກໍໄດ້ ແລະ ສ່ວນໜຶ່ງອີກແມ່ນມາຈາກມະນຸດ ປັກກິ່ງ ຊຶ່ງກາຍເປັນຊົ່ ຕະກຸນມະນຸດພາກພື້ນອາຊີ.



ຮູບຖ່າຍຂວານຫີນ ຂອງຄົນບູຮານ ທີ່ຄົ້ນພົບຢູ່ພາກເໜືອຂອງ ສ.ປ.ປ.ລາວ
ຈັດວາງສະແດງໄວ້ ທີ່ຫໍວາງສະແດງ ແຂວງຫຼວງນ້ຳທາ

ເຊື້ອຊາດຊະວາ ໄດ້ເຄື່ອນຍ້າຍຂຶ້ນມາທາງຕອນໃຕ້ຂອງແຫລມອິນດູຈີນ, ຕໍ່ມາຈຶ່ງມີເຊື້ອຊາດ ຂອມ ເຂົ້າມາຢູ່ເປັນເຊື້ອຊາດທີ່ສືບເຊື້ອສາຍມາຈາກຊົນເຜົ່າ ອອສໂຕເອເຊຍ ທີ່ເຄື່ອນຍ້າຍມາຈາກເຂດພູດອຍ ທາງພາກຕາເວັນຕົກ ຂອງປະເທດຈີນ ຕິດກັບອິນເດຍ ລົງມາທາງທິດເໜືອ ຂອງປະເທດ ມຽນມາ ຕາມທີ່ງພຽງແຄມແມ່ນ້ຳ ອີຣາວະດີ ແລະ ແມ່ນ້ຳສາລະວິນ. ຕໍ່ມາ ຊົນເຜົ່າມອນ, ຂອມ ກາຍເປັນຊົນເຜົ່າກຶມມຸ, ຂະເໝນ ແລະ ອື່ນໆ ຈຶ່ງໄດ້ແຜ່ອຳນາດມາຍາດ ຊິ່ງດິນແດນຂອງຊົນເຜົ່າຊະວາ ຊຶ່ງໄດ້ຖອຍລົງໄປຕັ້ງຖິ່ນຖານຢູ່ໝູ່ເກາະຊະວາ ໃນປະເທດ ອິນໂດເນເຊຍ ແລະ ສ່ວນໜຶ່ງອີກຄືຊົນເຜົ່າ " ອ້າຍລາວ " ທີ່ຢູ່ຕາມໂຫ້ງແມ່ນ້ຳຂອງ ກໍຖືກຊົນເຜົ່າ

ມອນ, ຂອມ ເຊື່ອມກືນຊຶ່ງກັນ ແລະ ກັນ ກາຍເປັນຊົນເຜົ່າລາວເດີມດຳລົງຊີວິດຢູ່ແຖບທົ່ງພຽງ, ສ່ວນຊົນເຜົ່າຂອມ (ກຶມມຸ) ຕ່າງໆ ແມ່ນໄດ້ໄປດຳລົງຊີວິດຢູ່ແຖບພູ ແຕ່ເໜືອຮອດໃຕ້. ເຮົາຈຶ່ງ ສາມາດນຳເອົາປັດຊະຍາ " ນ້ຳເຕົ້າປຸງ " ຊຸນບູລົມ ມາອະທິບາຍສະພາບນີ້ໄດ້.



ເຄື່ອງປັ້ນດິນເຜົາ ທີ່ຄົ້ນພົບຢູ່ ບ້ານ ເລົ່າປ່າກໍ ແຄມງຶ່ມ,
ເຂດປາກຊາບ, ເມືອງ ໄຊທານີ ອາຍຸ ກວ່າ 2 ພັນປີ.

ໃນສະໄໝທີ່ຊົນເຜົ່າມອນ, ຂອມ ເປັນໃຫຍ່ຢູ່ໃນຂົງເຂດນີ້ ຫລື ເຂດ ສຸວັນນະພູມ ປະເທດນີ້ ໄດ້ແບ່ງອອກເປັນ 2 ອານາຈັກໃຫຍ່ໆ ຄື: ອານາຈັກທະວາຣາວະດີ ຫຼື ອານາຈັກສີໄຊ ແລະ ອານາຈັກໂຄຕະປູຣະ ຫຼື ໂຄຕະບູນ (ສີໂຄດຕະບອງ).

ອານາຈັກສີໂຄດຕະບອງ (ໂຄຕະບູນ) ແປວ່າເມືອງຕາເວັນອອກ ຂອງອານາຈັກທະຣາວະດີ ຊຶ່ງມີເນື້ອທີ່ແຕ່ເມືອງ ນະຄອນລາຊະສີມາ ເປັນຕົ້ນມາ ກວມເອົາພາກອີ່ສານ ຂອງປະເທດໄທ ແລະ ປະເທດລາວ ນັບແຕ່ວຽງຈັນ ລົງໄປເຖິງນະຄອນຈຳປາສັກ. ອີກພາກສ່ວນໜຶ່ງ ເຄື່ອນຍ້າຍລົງມາຈາກພາກໃຕ້ຂອງປະເທດຈີນ, ເອີ້ນວ່າ: ຊົນເຜົ່າອ້າຍລາວ. ຊົນເຜົ່າອ້າຍລາວ ໄດ້ມາຕັ້ງຫຼັກຖານຢູ່ດິນແດນລະຫວ່າງ ແມ່ນ້ຳ ຮວງໂຫ ກັບແມ່ນ້ຳຢັ້ງຈີ (ແຢງຊີກຽງ) ຫຼື ເປັນ ເຂດເມືອງ ເສສວນ ຂອງຈີນ ທຸກວັນນີ້ ມີອາຊີບທຳມາຫາກິນດ້ວຍການກະສິກຳ, ໃນລະຫວ່າງ ກ່ອນພຸດທະສັກກະລາດ 2.500 ປີມາແລ້ວ.

ນັບແຕ່ນັ້ນມາ, ຊົນຊາດອ້າຍລາວ ໄດ້ເຄື່ອນໄຫວດຳລົງຊີວິດ ແລະ ປົກຄອງກັນມາໄດ້ຫລາຍສະຕະວັດ, ແລະ ໄດ້ເລົ່າກັນຕາມຕຳນານ ຂຸນບູລົມ. ມາຈົນເຖິງປີ 246 ກ່ອນຄ.ສ ຈຶ່ງປະກົດໄດ້ມີຊື່ກະສັດລາວຜູ້ທຳອິດ ປົກຄອງອານາຈັກອ້າຍລາວ ຊື່ວ່າ: ຂຸນເມັ້ງ, ຊຶ່ງມີເມືອງຫລວງ ຊື່ວ່າ: ນະຄອນເພງາຍ ແລະ ກໍຕົກເປັນເມືອງຂຶ້ນຂອງຈີນ ໃນຕໍ່ມາ.

ຕໍ່ມາແຕ່ ປີ 395 ເຖິງ ປີ 649 ຈຶ່ງມີເຈົ້າທະຣະນະ ຫຼື ສົມຸໂລ ຂຶ້ນເປັນເຈົ້າຊີວິດ, ເຖິງສະໄໝ ເຈົ້າ ຂຸນບູລົມ ລາຊາທິ ລາດ ຂຶ້ນເປັນເຈົ້າແຜ່ນດິນ ໃນປີ 729 ແລະ ພະອົງໄດ້ພາໄພ່ພົນລົງມາສ້າງ ເມືອງ ແຖນ ຫຼື ກາຫຼົງ (ເກົ້າຫຼົງ) ແລ້ວມອບໃຫ້ ຂຸນລໍ ຢູ່ຮັກສາ.

ຍ້ອນຖືກຮຸກຮານ ໂດຍ ຊາວມົງໂກຍ ແລະ ຊາວຈີນ ຢູ່ເລື້ອຍໆ, ຂຸນລໍ ຈຶ່ງໄດ້ພາໄພ່ພົນອົບພະຍົບ ລົງມາຕາມລຳນ້ຳຂອງ ແລະ ເຂົ້າຍຶດເອົາ ເມືອງ ຊວາ ຈາກ ຂຸນກັນຮາງ ຊຶ່ງເປັນຊາວຂອມ ແລະ ພະອົງ ຈຶ່ງຕັ້ງເປັນຣາຊະທານີ (ເມືອງຫລວງ) ຂອງປະເທດລ້ານຊ້າງ ຂຶ້ນເປັນຄັ້ງທຳອິດ ໃນລະຫວ່າງ ປີ 757 ແລ້ວປ່ຽນຊື່ເມືອງໃໝ່ວ່າ ເມືອງ ຊຽງທອງ. ຕັ້ງແຕ່ນັ້ນມາຊົນເຜົ່າລາວຈຶ່ງໄດ້ຫລັ່ງໄຫລກັນລົງມາຕັ້ງຖິ່ນຖານບ້ານເຮືອນຢູ່ດິນແດນລ້ານຊ້າງ ແລະ ແຜ່ຜາຍອຳນາດອອກໄປຢ່າງກວ້າງຂວາງ ຕາມໄຫຼ່ງແມ່ນ້ຳຂອງ ເຮັດໃຫ້ຊາວຂອມ ຍົກຍ້າຍຊ້າຍສວຍ ໄປທາງ ເມືອງ ນ່ານ ແລະ ອີກຈຳນວນໜຶ່ງ ກໍຖອຍລົງມາທາງ ວຽງຈັນ ແລະ ທາງໃຕ້ໄປເລື້ອຍໆ ແລະ ຄ່ອຍໆ ເຊື່ອມໂຍງເຂົ້າເປັນຊາວພື້ນເມືອງ.

ນັບແຕ່ ຂຸນລໍ ເປັນຕົ້ນມາ ກໍໄດ້ມີກະສັດລາວ ສືບຕໍ່ປົກຄອງດິນແດນລ້ານຊ້າງ ເຖິງ 22 ພະອົງ, ຄິດເປັນເວລາມານເຖິງ 500 ກວ່າປີ ຈຶ່ງມາເຖິງເຈົ້າຟ້າງຸ່ມ ແລະ ຈາກນັ້ນມາຊົນເຜົ່າລາວ ກໍໄດ້ຕັ້ງເປັນຫລັກຖານໝັ້ນແກ່ນ ເທິງດິນແດນລ້ານຊ້າງ ແຫ່ງນີ້ ຈົນມາເຖິງປະຈຸບັນນີ້.



ເຈົ້າຂຸນເມັ້ງ
ພະມະຫາບຸຣຸດລາວໃນ
ຣາຊອານາຈັກອ້າຍລາວ




ເຈົ້າຂຸນລໍ ພະມະຫາ
ບູຣຸດລາວໃນຣາຊອານາ
ຈັກ ລາວລ້ານຊ້າງ
ປີ 749 - ປີ 810

ອາດເວົ້າໄດ້ວ່າ ຊົນເຜົ່າດັ້ງເດີມ ທີ່ປະກົດໃນຕຳນານບູຮານຂອງລາວ ເຊັ່ນ: ນິທານ ຂຸນບູລົມ ແລະ ອຸຮັງຄະທາດ ຊຶ່ງໄດ້ເລົ່າຄືນອະດີດອັນຍາວໄກຂອງລາວ ກໍບອກວ່າໃນລຸ່ມແມ່ນ້ຳຂອງຕອນກາງ ນີ້ໄດ້ເປັນທີ່ຢູ່ອາໄສຂອງຊົນເຜົ່ານາກ, ໄຕ, ຂອມ, ລາວເກົ່າ ແລະ ໃນຕຳນານ ຂຽງແສນ ກໍໄດ້ບອກວ່າ: ມະນຸດດັ້ງເດີມຂອງລຸ່ມແມ່ນ້ຳຂອງຕອນເໜືອ ແມ່ນຊົນເຜົ່າລະວະ, ລະວ້າ ແລ້ວຂຽນເປັນລາວ ຊຶ່ງມີຫົວໜ້າເຜົ່າຊື່ລາວຈົກ ຫລື ລະວະຈັງກະຣາດ, ຊຶ່ງສະໄໝນີ້ແມ່ນນອນໃນສັງຄົມກົກເຄົ້າເຫຼົ່າກໍຂອງລາວນັ້ນເອງ.

ຕາມຄວາມເຫັນຂອງບັນດາ ນັກພາສາສາດ ໃຫ້ຂໍ້ສະຫລຸບວ່າ ທັງໝົດບໍລິເວນ ອາຊີອາຄະເນ ກ່ອນປະຫວັດສາດນັ້ນ, ທາງດ້ານພາສາ ກໍໄດ້ມີລະບົບພາສາລວມ ເອີ້ນວ່າ ພາສາ ອາຊີອາຄະເນ (ລະບົບພາສາທິດໃຕ້ - ໂອສະຕິກ). ນັ້ນແມ່ນຮູບແບບພາສາພະຍາງດຽວ ມີວິທີປະສານສັບ, ມີໂຄງປະກອບໄວຍາກອນ, ທີ່ຕັ້ງຂອງຄຳສັບປ່ຽນແປງໃນຂະບວນວິວັດແຫ່ງປະຫວັດສາດ. ຍ້ອນມີການພົວພັນກັບບັນດາພາສາອື່ນຢູ່ໃນແຜ່ນດິນໃຫຍ່ອາຊີອາຄະເນ ແລະ ໝູ່ເກາະ ໃນມະຫາສະໝຸດ, ພາສາອັນນີ້ໄດ້ແບ່ງອອກເປັນ 3 ສາຍຕົ້ນຕໍຄື: ມອນ - ຂະແມ, ລາວ - ໄທ ແລະ ມາລະຢູ - ໂປລີເນເຊຍ. ພ້ອມກັນນັ້ນ, ຍ້ອນມີການເຄື່ອນຍ້າຍຂອງຊຸມຊົນ ຈາກທິດເໜືອ ລົງມາເປັນສ່ວນໜຶ່ງໃນບໍລິເວນນີ້ ຈຶ່ງປະກົດມີພາສາຈຳນວນໜຶ່ງເປັນລະບົບພາສາທາມ - ຕິເບດ, ປົນເປກັນກັບສາຍໂລ ໂລ - ພະມ້າ ແລະ ໄດ້ກາຍເປັນສ່ວນປະກອບອັນໜຶ່ງທີ່ສຳຄັນໃນໂຄງປະກອບພາສາອາຊີອາຄະເນ.

ທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແມ່ນໄດ້ມີການເຮັດນາ, ລ້ຽງສັດ, ການຊ່າງຕ່າງໆ ຊຶ່ງເປັນບ່ໍເກີດແຫ່ງຄວາມອຸດົມສົມບູນ, ເຮັດໃຫ້ສັງຄົມຂະຫຍາຍຕົວ ແລະ ເປັນບ່ໍເກີດຂອງວັດທະນະທຳ ຂະແໜງຕ່າງໆ. ຜົນງານທີ່ສຳຄັນຂອງສັງຄົມ ຊົນເຜົ່າຕ່າງໆ ມີຄື: ເຄື່ອງປັ້ນດິນເຜົາ; ການສ້າງອະນຸສາວະລີ ຫີນໃຫຍ່ ເຊັ່ນ: ຫີນຕັ້ງ, ໄຫຫີນ, ຕ່ັງຫີນ, ໂລງສົບຫີນ, ຫລຸມສົບທີ່ກໍ່



ເຈົ້າ ຂຸນບໍຣິມ ຣາຊາທິຣາຊ
ພະມະຫາບູຣຸດລາວ ໃນຣາຊອາ
ນາຈັກ ໜອງແສ
ປີ 729 - ປີ 750



ຂຸນເຈືອງ ຟ້າທຳມະລາດ
ຜູ້ສ້າງໄຫຫີນ (ໄຫເຫຼົ້າເຈືອງ)
ຢູ່ແຂວງ ຊຽງຂວາງ

ດ້ວຍແທ່ງຫີນ, ຮ່ອງຮອຍຂອງສັງຄົມຊົນເຜົ່າໃນລຸ່ມແມ່ນ້ຳຂອງ ເຊັ່ນ: ຢູ່ຕາມສາຍພູເລັຍ (ຫຼວງ ພະບາງ), ທົ່ງໄຫຫີນຊ່ຽງຂວາງ, ມະຫາໄຊ, ຍົມມະລາດ, ເຂດລຸ່ມນ້ຳເທີນ, ໂນນນົກຫາ, ບ້ານ ຊ່ຽງ, ສີໂຄດຕະບອງ ເມືອງ ຊະນະຄາມ, ເຂດລ່ອງນ້ຳຊອງ.



ສ່ວນໜຶ່ງຂອງໄຫຫີນ ທີ່ທົ່ງໄຫຫີນ,ແຂວງຊ່ຽງຂວາງ,
ໄຫຫີນເຫຼົ່ານີ້ ແມ່ນຮ່ອງຮອຍທາງປະຫວັດສາດ ຂອງຊົນຊາດລາວ ເມື່ອ 2.500 ປີກ່ອນ

ເມືອງ ວຽງຈັນ ບູຮານ ໄດ້ມີຊື່ສຽງຂຶ້ນມາເທິງດິນແດນລ້ານຊ້າງແຫ່ງນີ້. ດ້ວຍຂໍ້ມູນ ແລະ ແຫລ່ງທີ່ມາແຕກຕ່າງກັນ ແຕ່ກໍມີບາງຈຸດທີ່ຄ້າຍຄືກັນພໍເປັນໜ້າເຊື່ອຖືໄດ້, ເຊັ່ນວ່າ: ດິນແດນ ອັນເປັນບັນດາປະເທດ ອາຊີອາຄະເນ ທັງໝົດ ຫລື ເອີ້ນວ່າ ສຸວັນນະພູມປະເທດ ມາແຕ່ບູຮານ ກ່ອນສະໄໝ ພຸດທະສັກກະຣາດ ຈົນມາເຖິງສະໄໝຂອງພະຍາ ອະໂສກຣາດ (ປີ 236) ແລະ ສະໄໝຕໍ່ໆມານັ້ນ ແມ່ນເປັນບ່ອນຢູ່ອາໄສຂອງຊົນເຜົ່າອິນເດຍບູຮານ ຊຶ່ງຈຳແນກອອກເປັນ ເຊື້ອຊາດຕ່າງໆ ໃນເວລາຕໍ່ມາຄື: ຊາດມອນ ຫລື ເມັ່ງ ຫຼື ຣາມັນ, ຈາມ, ຂະເໝນ, ຂອມ,

ຊະວາ, ມາເລເຊຍ, ອິນໂດເນເຊຍ ມາກ່ອນ ຊຶ່ງພາສາສາກົນ ເອີ້ນວ່າ: ພວກໂອຕົກໂຕນ (autochton) ຫລື ອັອດໂຕເນເຊຍ (Austronesia) ຫລື ເຜົ່າເດີມ. " ເພາະວ່າ ຕາມຫລັກຖານທາງປະຫວັດສາດ ແລະ ບູຮານວັດຖຸ ທີ່ຂຸດຄົ້ນໄດ້ໃນດິນແດນທີ່ກ່າວມານີ້ ເປັນຕົ້ນວ່າ ຂວານຫີນ, ເຄື່ອງສຳລິດ ແລະ ຮ່າງກະດູກຂອງຄົນບູຮານ ທີ່ນັກບູຮານວັດຖຸ ແລະ ບູຮານຄະດີ ທັ່ງຫລາຍລົງຄຳເຫັນວ່າ ເປັນສີ່ມືຂອງຄົນຊາດ ຂອມ ອັນເປັນຊົນເຜົ່າຂອງອິນເດຍບູຮານ ເຜົ່າ ໜຶ່ງ ຊຶ່ງສາກົນເອີ້ນວ່າພວກ " ເວັດດາ " (vedda).

ຕົວຢ່າງ: ຂວານຫີນ ທີ່ຂຸດໄດ້ຢູ່ໃນ ແຂວງ ຫລວງພະບາງ, ຮ່າງກະດູກ, ເຄື່ອງສຳລິດ ແລະ ຂວານຫີນ ທີ່ຂຸດໄດ້ຢູ່ ບ້ານ ໂນນນົກຫາ ເຂດອຳເພີ ນ້ຳພອງ ຈັ່ງຫວັດ (ແຂວງ) ຂອມ ແກ່ນ ເມື່ອປີ 1966 (ຂຸດໂດຍນາຍ ວິລເຮັມລ໌) ແລະ ມະຫາຄຳຈຳປາ ແກ້ວມະນີ (ນັກບູຮານ ຄະດີ ຄົນທຳອິດຂອງລາວ) ບອກວ່າ: ເຄື່ອງທີ່ຂຸດໄດ້ນີ້ ເປັນຂອງທີ່ມີອາຍຸສະໄໝດຽວກັນກັບ ຂອງທີ່ຂຸດພົ້ບຢູ່ແຖບແມ່ນ້ຳສິນທຸ ໃນອິນເດຍ ແລະ ຂອງທີ່ຂຸດໄດ້ຈາກ ບ້ານ ໂນນນົກຫາ ນີ້ມີອາ ຍຸມາແລ້ວ ບໍ່ໜ້ອຍກວ່າ 4.400 ປາຍປີ. ເພາະສະນັ້ນ ໃນເລື່ອງທີ່ວ່າ ທ້າວ ທະຕະລັດຖະ ມາ ຈາກ ເມືອງ ຂະເໝນ (ອິນທະປັດຖາ) ແລະ ໄດ້ມາຕັ້ງ ວຽງຈັນ ຂຶ້ນກ່ອນນັ້ນ ອາດຈະແມ່ນຊົນ ເຜົ່າ ຂອມ ຈຸໜຶ່ງ ທີ່ແຜ່ຂະຫຍາຍຂຶ້ນມາຕັ້ງບ້ານເມືອງ ຕາມສອງຟາກຝັ່ງໂຟ້ງແມ່ນ້ຳຂອງ ຕັ້ງ ແຕ່ຫລາຍພັນປີແລ້ວຢ່າງແນ່ນອນ. ອີງຕາມຫລັກຖານທາງປະຫວັດສາດ, ພູມສາດ, ບູຮານສະ ຖານ ແລະ ບູຮານວັດຖຸທັ່ງຫລາຍ ທີ່ມີຢູ່ໃນແຖບນີ້ ລ້ວນແຕ່ແມ່ນສີ່ມືຂອງ ຂອມ ທັ່ງນວນ, ເຊັ່ນ ເມືອງ ຮ້າງຊາຍຟອງ ທີ່ຢູ່ໃຕ້ວຽງຈັນ ນີ້ກໍແມ່ນສີ່ມືຂອງ ຂອມ (ເບິ່ງສິລາເລກຕົວໜັງສື ຂອມ ບູ ຮານ ທີ່ຂຸດໄດ້ຈາກ ບ້ານ ຊາຍຟອງ, ຢູ່ໃນ ຫໍພະແກ້ວ ດຽວນີ້), ພະພຸດທະຮູບຫີນ ທີ່ໄດ້ຈາກ ບ້ານ ທ່າລາດ ໃນປີ 1970 ນີ້ (ເວລານີ້ຢູ່ ຫໍພະແກ້ວ) ກໍເປັນລັກສະນະພະພຸດທະຮູບ ອິນເດຍ ໃນຄັ້ງ ລະຊະວົງຄຸບຕະ (ປະມານ ປີ 663) ເປັນຕົ້ນ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າເຊື້ອຊາດຂອມ ຊຶ່ງ ເປັນເຜົ່າ ອິນເດຍ ບູຮານ ໄດ້ເຂົ້າມາຕັ້ງຖິ່ນຖານດຳລົງຊີວິດຢູ່ຂອບເຂດປະເທດລາວ ທຸກວັນນີ້ ຕັ້ງດົນມາແລ້ວ.

ໃນໜັງສືອຸຮັງຄະນິທານ (ອຸຮັງຄະທາດ) ໄດ້ກ່າວເຖິງຕົ້ນເຫດການສ້າງນະຄອນວຽງຈັນ ໄວ້ ດັ່ງບາງຕອນ ດັ່ງນີ້:

" ເມື່ອພຣະພຸດທະເຈົ້າ ໂຄຕະມະປະລິນິບພານ ແລ້ວໄດ້ 8 ປີ, ພະມະຫາກັດສະປະ ໄດ້ ນຳເອົາອຸຮັງ ຄະທາດຄືດູກຫົວອົກ (ຫລື ຫົວເນົ່າ) ຂອງພຣະພຸດເຈົ້າ ໂຄຕະມະ ມາປະດິດສະ ຖານໄວ້ທີ່ດອຍກະປະນະຄີລີ (ພູກຳພ້າ) ໃນເຂດ ເມືອງ ໂຄຕະບູນ (ຄື ທາດພະນົມ ດຽວນີ້) ແລ້ວພະຍາ ທັ້ງ 5 ພະນະຄອນ ໄດ້ມາຊ່ວຍກັນສ້າງ ພະເຈດີ ບັນຈຸພະອຸຮັງຄະທາດນັ້ນ, ພະຍາ ທັ້ງ 5 ນະຄອນ ນັ້ນ ຄື:

(1) ພະຍາ ເມືອງ ອິນທະປັດຖະ (ເມືອງ ຂະເໝນ)

(2) ພະຍາ ຈຸລະນີ (ເມືອງ ຊຽງຂວາງ)

(3) ພະຍາ ນັນທະເສນ (ເມືອງ ສີໂຄດຕະບູນ ຄືທ່າແຂກ)

(4) ພະຍາ ສຸວັນນະພິງຄານ (ເມືອງ ໜອງຫານຫລວງ)

(5) ພະຍາ ສຸວັນນະຣັດຕະນະ (ຄຳແດງ) (ເມືອງ ໜອງຫານນ້ອຍ)



ຊົນເຜົ່າ ຂອມ

ເມື່ອສ້າງ ທາດພະນົມ ແລ້ວ ຕໍ່ມາບໍ່ນານກໍເກີດອຸທົກກະໄພ, ນ້ຳຖ້ວມ ເມືອງ ໜອງທານ ຫລວງ ແລະ ເມືອງ ໜອງທານນ້ອຍ ຈົນໝົດ, ເຮັດໃຫ້ປະຊາຊົນຈົມນ້ຳຕາຍເປັນອັນມາກ. ໃນ ຄາວນັ້ນ ທ້າວ ຄຳບາງ ຜູ້ເປັນເຊື້ອສາຍຂອງ ພະຍາ ສຸວັນນະພິງຄານ ເມືອງ ໜອງທານຫລວງ ໄດ້ພາໄພ່ຟ້າປະຊາກອນຂອງຕົນ ອົບພະຍົບຂຶ້ນມາຕັ້ງບ້ານເມືອງຢູ່ທີ່ຫ້ວຍ ເກົ້າລ້ຽວ (ບໍລິເວນ ບ້ານ ເກົ້າລ້ຽວ ທຸກວັນນີ້) ແລະ ໃສ່ຊື່ເມືອງຂອງຕົນວ່າ: ເມືອງ ສຸວັນນະພູມ ແລ້ວໃຫ້ບ່າວໄພ່ ຂອງຕົນແຍກຍ້າຍໄປຕັ້ງບ້ານເຮືອນ ຢູ່ອ້ອມແອ້ມໃກ້ຄຽງກັນນັ້ນ.

ໃນເວລານັ້ນ ໄດ້ມີຊາຍຄົນໜຶ່ງຊື່ ບູລິຈັນ (ຫລື ອ່ວຍລ່ວຍ) ໄດ້ພາຍາດພີ່ນ້ອງມາຕັ້ງ ບ້ານເຮືອນຢູ່ແຄມຮ່ອງ ແກປາກໜອງຄັນແທເສື້ອນ້ຳ. ບູລິຈັນເປັນຄົນໃຈບຸນຮັກສາສິນກິນທານ ບໍ່ໄດ້ຂາດຊາວບ້ານ ຈຶ່ງຕັ້ງໃຫ້ເປັນຫົວໜ້າໝູ່ ຫລື ຫົວໜ້າບ້ານ, ຫລື ນາຍບ້ານ.

ໃນສະໄໝດຽວກັນນີ້ທາງ ເມືອງ ສາເກດນະຄອນ (ຄື ເມືອງ ຮ້ອຍເອັດ) ກໍເກີດຄວາມ ວຸ້ນວາຍເນື່ອງຈາກມີຂ້າເສິກຊາວ ເມືອງ ກຸຣຸນທະນະຄອນ ຄືທະວາຣາວະດີອະຍຸທະຍາ, ຍົກ ທັບມາຮາວີລົບກວນ, ຊາວເມືອງ ສາເກດນະຄອນ ຈຶ່ງແຕກໜີຂຶ້ນມາເພິ່ງ ທ້າວ ຄຳບາງ ຊຶ່ງມີ ໝື່ນຫລວງກາງໂຮງ ກັບໝື່ນ ນັນທະອາຣາມ ພາເຈົ້າ ສັງຄະວິຊາກຸມານ ກັບຄົວບ່າວໄພ່ ສອງ ແສນຄົນ ຂຶ້ນມາ ເມືອງ ສຸວັນນະພູມ. ທ້າວ ຄຳບາງ ໃຫ້ເຈົ້າ ສັງຄະວິຊາ ຕັ້ງຖິ່ນຖານ ຢູ່ບ້ານ ໜອງຄາຍ, ເປັນເມືອງ ຫລ້າໜອງຄາຍ ແລ້ວໃຫ້ໝື່ນ ກາງໂຮງ ພາບ່າວໄພ່ຂອງຕົນ 50.000 ຄົນ ມາຕັ້ງຖິ່ນຖານຢູ່ແຄມປາກຫ້ວຍ ຄູຄຳ (ບ້ານ ວຽງຄຸກ) ໃຫ້ໝື່ນນັນທະອາຣາມ ພາໄພ່ພົນ 50.000 ຄົນ ຂຶ້ນມາຕັ້ງຖິ່ນຖານຢູ່ແຄມ ປາກຫ້ວຍນົກຍູງ (ຄື ຫ້ວຍນ້ຳໂມງ ທຸກວັນນີ້) ໃຫ້ໝື່ນ ພະນ້ຳຮຸ່ງ ພາໄພ່ພົນ 50.000 ຄົນ ຂ້າມນ້ຳຂອງ ມາຕັ້ງບ້ານເຮືອນຢູ່ທີ່ ຊຽງສາ (ຄື ແຂວງ ບໍລິ ຄຳໄຊ ດຽວນີ້).❶

ຢູ່ຕໍ່ມາ ບູລິຈັນ ຫົວໜ້າບ້ານ ໜອງຄັນແທເສື້ອນ້ຳ ມາໄດ້ກັບ ນາງ ອິນທະສະຫວ່າງ ທິ ດາຂອງທ້າວ ຄຳບາງ ເຈົ້າເມືອງ ສຸວັນນະພູມ, ແລ້ວ ບູລິຈັນ ຈຶ່ງຕັ້ງບ້ານ ໜອງຄັນແທ ຂຶ້ນເປັນ ເມືອງ ຮຽກວ່າ: " ເມືອງ ຈັນທະບູລີ " ຕາມຊື່ຂອງຕົນເອງ. ເມື່ອ ບູລິຈັນ ຕັ້ງເມືອງຂຶ້ນແລ້ວ ຈຶ່ງ ຈັດແຈ່ງແຕ່ງເຄື່ອງຣາຊາບັນນາການ ໄປຖວາຍ ເຈົ້າ ສຸມິດຕະ ທຳມະວົງສາ ເຈົ້າແຜ່ນດິນແຫ່ງ ເມືອງ ມະຣຸກະນະຄອນ (ຄື ເມືອງ ທ່າແຂກ ຫລື ສີໂຄດຕະບູນ) ອົງເປັນເຈົ້າແຜ່ນດິນເອກະ ຣາດ. ເຈົ້າ ສຸມິດຕະ ທຳມະວົງສາ ຈຶ່ງແຕ່ງໃຫ້ພາມ 5 ຄົນ ຂຶ້ນມາອະພິເສກບູລິຈັນ ໃຫ້ເປັນເຈົ້າ ນະຄອນຈັນທະບູຣີ ມີພຣະນາມວ່າ ເຈົ້າ ຈັນທະບູລີ ປະສິດທິສັກ. ພ້ອມກັນນີ້, ຍັງໄດ້ ພຣະຣາ ຊະທານ ນາງ ກັນລະຍານີ 2 ຄົນ ມາໃຫ້, ແລ້ວພຣະອົງກໍໄດ້ກຳນົດເຂດແດນ ເມືອງ ຈັນທະບູລີ ຄື: ທາງ ໃຕ້ນັບແຕ່ນ້ຳກະດິງ ຂຶ້ນມາ ແລະ ຟາກນ້ຳຂອງ ນັບແຕ່ຫ້ວຍ ບາງບາດ ຂຶ້ນມາ.

---

1. ຈາກການຄົ້ນຄວ້າຂອງມະຫາສີລາ ວິລະວົງ ແລະ ມະຫາຄຳຈຳປາ ແກ້ວມະນີ.

ເມື່ອໄດ້ເປັນເຈົ້ານະຄອນວຽງຈັນແລ້ວ, ພະຍາ ຈັນທະບູລີ ປະສິດທິສັກ (ຊຶ່ນາມະຍົດ) ກໍໄດ້ສ້າງຂົວຂ້າມບຶ່ງອ່ວຍລ່ວຍ ອອກໄປຫາບ້ານເກົ່າ ແລະ ສ້າງວັດຂຶ້ນໃນບ້ານເກົ່ານັ້ນ ຮຽກ ວ່າ: ວັດສວນອ່ວຍລ່ວຍ, ສ້າງວິຫານຂຶ້ນອີກ 2 ຫລັງຢູ່ປ່າໃຕ້ ແລະ ປ່າເໜືອ. ຕໍ່ຈາກນັ້ນມາກໍ ມີພະອໍຣະຫັນ 5 ອົງ ໄດ້ນຳເອົາພະສາຣີຣິກະທາດ ຂອງພະພຸດທະເຈົ້າ ມາຈາກ ເມືອງ ຣາຊະຄຶ (ໃນປະເທດ ອິນເດຍ) ໂດຍຜ່ານມາທາງ ເມືອງ ລະໂວ້ (ລົບບູລີ) ແລະ ເມືອງ ຣາຊະສີມາ ມາບັນຈຸໄວ້ໃນທີ່ຕ່າງໆ ຄຶ:

ທາດດູກຝາຕີນ ບັນຈຸໄວ້ ເມືອງ ຫ້ວາໜອງຄາຍ.

ທາດດູກແຂ້ວຝາງ ບັນຈຸໄວ້ທີ່ ວຽງງົວ (ບ້ານ ພະໂຄ)

ທາດດູກຫົວເນົ່າ ຫລື ຫົວອົກ ບັນຈຸໄວ້ທີ່ ພູເຂົາລວງ (ໂພນຂົ້ນາກ) ຄືຄຸ້ມ ບ້ານ ທາດ ຫລວງວຽງຈັນ ດຽວນີ້.

ໃນການບັນຈຸ ພະທາດຫົວເນົ່າ ນີ້ແມ່ນ ພະຍາ ຈັນທະບູລີ ປະສິດທິສັກ ເປັນປະທານ, ອຸ ມຸງທີ່ ພະຍາ ຈັນທະບູລີ ສ້າງຂຶ້ນນີ້ກວ້າງ ດ້ານລະ 5 ວາ, ສູງ 4 ວາ 3 ສອກ ທ່ໍນັ້ນ. ອັນເປັນ ທາດດັ້ງເດີມ, ຕໍ່ມາເມື່ອ ປີ 1566 ສົມເດັດເຈົ້າ ໄຊເຊດຖາທິລາດ ຈິ່ງໄດ້ສ້າງຂຶ້ນໃຫ້ໃຫຍ່ສູງ ແລະ ສະຫງ່າງາມ ດັ່ງທີ່ເຫັນຢູ່ທຸກວັນນີ້.

ໂດຍອີງຕາມຕຳນານ ທີ່ກ່າວມາຂ້າງເທິງນີ້, ເຫັນໄດ້ວ່າ ປະຫວັດການສ້າງ ວຽງຈັນ ຄັ້ງ ທຳອິດແມ່ນ ບູລີຈັນ ຫລື ພະຍາ ຈັນທະບູລີ ປະສິດທິສັກ, ໂດຍໃສ່ຊື່ເມືອງ ວຽງຈັນ ຕາມຊື່ຂອງ ເພິ່ນເອງຄຶ ບູລີຈັນ. ບູລີຈັນ ກໍມີຄວາມໝາຍວ່າ " ວຽງຈັນ " ແລະ ຈັນທະບູລີ ທີ່ເປັນຄຳສັບບາລີ " ບູລີ " ແປວ່າ ເມືອງ ຈິ່ງມີຄວາມໝາຍ " ເມືອງ ຈັນ ຫລື ວຽງຈັນ ". ເຖິງວ່າ ປະຫວັດ ການສ້າງ ເມືອງວຽງຈັນ ທຳອິດ ຈະບໍ່ຮູ້ກຳນົດເວລາລະອຽດ ແຕ່ກໍພໍຈະສັນນິຖານໄດ້ວ່າ ເມືອງ ວຽງຈັນ ອາດສ້າງຂຶ້ນ ໃນລະຫວ່າງ ປີ 307 ພ້ອມກັບຍຸກສະໄໝຂອງ ພະຍາ ອະໂສກະຣາດ ແຫ່ງປະ ເທດ ອິນເດຍ ໄດ້ສົ່ງພະອໍລະຫັນ 5 ອົງ ນຳເອົາພະສາຣີຣິກະທາດ ຂອງພະພຸດທະເຈົ້າ ຢູ່ເມືອງ ຣາຊະຄຶ ເຂົ້າມາແຜ່ຜາຍໃນອິນດູຈີນ ຫລື ສຸວັນນະພູມ ແຫ່ງນີ້. ໃນຂະນະນັ້ນ ບູລີຈັນ ຫລື ພະ ຍາ ຈັນທະບູລີ ປະສິດທິສັກ ນີ້ເອງ, ເປັນປະທານຮັບເອົາ ພະທາດຫົວເນົ່າ ຂອງພະພຸດທະເຈົ້າ ຈາກພະອໍລະຫັນ 5 ອົງ ທີ່ກ່າວມານັ້ນ ມາບັນຈຸໄວ້ໃນ ພະທາດຫລວງ ເປັນຄັ້ງທຳອິດ. ອີກບັນ ທາໜຶ່ງ, ບູລີຈັນ ແລະ ຊາວເມືອງວຽງຈັນນັ້ນ ກໍອາດແມ່ນຄົນຊົນເຜົ່າຂອມ, ຊຶ່ງແມ່ນຊົນເຜົ່າ ແຂກອິນເດຍບູຮານເຜົ່າໜຶ່ງ, ຍ້ອນວ່າດິນແດນອິນດູຈີນ, ໂດຍສະເພາະແມ່ນພາກອີສານ (ປະ ເທດໄທ) ແລະປະເທດລາວເດີມ ເປັນບ່ອນຢູ່ຂອງເຊື້ອຊາດ ຂອມ ມາແລ້ວຫລາຍພັນປີ (ຕາມ ຫລັກຖານບູຮານ ວັດຖຸທີ່ຂຸດໄດ້ຈາກ ບ້ານ ໂນນນົກທາ ແລະ ແຫ່ງອື່ນໆ...).


2. ປະຫວັດສາດ ຄວາມເປັນມາຂອງເມືອງວຽງຈັນ ໃນສະໄໝອານາຈັກສີໂຄດຕະບອງ.

ອານາຈັກ ສີໂຄດຕະບູນ ຫລື ສີໂຄດຕະບອງບູຮານ ແມ່ນດິນແດນ ທີ່ກວມເອົາເຂດ ແຂວງ ຄຳມ່ວນ ປະຈຸບັນ (ທ່າແຂກ) ແລະ ນະຄອນພະນົມ ເປັນເມືອງຫລັກ, ມີສະຫວັນນະ ເຂດ, ສາກົນນະຄອນ, ໜອງຫານນ້ອຍ ວຽງຈັນ ແລະ ຮ້ອຍເອັດ ເປັນເຂດແຄວ້ນຂຶ້ນກັບອານາ ຈັກສີໂຄດຕະບອງ ສ່ວນໃຫຍ່ຢູ່ຝັ່ງຂວາແມ່ນ້ຳຂອງ. ຕາມຫລັກຖານບູຮານຄະດີ ໄດ້ພົບເມືອງ ຮ້າງໃນສະໄໝບູຮານ ໂດຍສະເພາະ ຢູ່ທີ່ບໍລິເວນລະຫວ່າງແມ່ນ້ຳມູນ ແລະ ນ້ຳຊີມີເຖິງ 240 ເມືອງ. ຫລັກຖານເຫລົ່ານີ້ ສະແດງວ່າເປັນເມືອງ ທີ່ສ້າງຂຶ້ນກ່ອນສະໄໝລາວເຮົາຮັບເອົາວັດ ທະນະທຳອິນເດຍ ເປັນເວລາ 1.000 ປີ (ວັດທະນະທຳ ອິນເດຍ ແຜ່ເຂົ້າມາລາວ ປະມານ 2.000 ປີ) ຊຶ່ງເປັນເມືອງທີ່ໄດ້ຂະຫຍາຍຕົວ ຈາກຍຸກທອງສຳລິດ ມາສູ່ຍຸກເຫລັກ ເພາະໄດ້ຂຸດ ພົບເຫັນເຫລັກ ທີ່ຫລໍ່ຫລອມເປັນເຄື່ອງມືອອກແຮງງານຫລາຍຢ່າງ ທີ່ມີອາຍຸປະມານ 2.500 ປີ ແລະ ຂຸດພົບເຫັນໄຮ່ນາ ຮູບ 4 ຫລ່ຽມຍາວຂະໜາດດຽວກັນຕະຫລອດ. ບັນດາເມືອງເຫລົ່ານີ້ມີ ຄູວຽງ ອ້ອມຮອບ ແລະ ນອກ ຄູວຽງ ກໍແມ່ນຮ່ອງນ້ຳອ້ອມ ຈຶ່ງເປັນເມືອງທີ່ມີປ້ອມປ້ອງກັນການ ໂຈມຕີຂອງສັດຕູຜູ້ມາຮຸກຮານຢ່າງໝັ້ນຄົງ ຊຶ່ງນັບວ່າເປັນຍຸກຕົ້ນ ຂອງສັງຄົມຄົນເມືອງພໍຍັງແຕ່ ເປັນນະຄອນລັດ ແຕ່ສະຕະວັດ ທີ 1 ຄົນຫລັງ ເທົ່ານັ້ນ. ບັນດານະຄອນລັດ ທີ່ຜາກົດຊື່ ຢູ່ໃນຕຳ ນານຕ່າງໆ ແລະ ຕາມຫລັກຖານທາງບູຮານຄະດີ ມີຄື:

1. ເມືອງ ຕາເມນ (ສຸວັນນະພູມ ຮ້ອຍເອັດ)
2. ເມືອງ ສາມແຫ (ເຊບັ້ງໄຟ)
3. ເມືອງ ຟ້າແດດ (ກາລະສິນ)
4. ເມືອງ ຊຽງທອງ (ຫລວງພະບາງ)
5. ເມືອງ ພານ (ວຽງພູພານ ອຸດອມ)
6. ເມືອງ ບົວບານ (ໜອງຄາຍ)
7. ເມືອງ ລວ (ວຽງຈັນ)
8. ເມືອງ ສີໂຄດ (ພູວົນ ແຂວງຄຳມ່ວນ)
9. ເມືອງ ໜອງຫານຫລວ (ສາກົນນະຄອນ)
10. ເມືອງ ໜອງຫານນ້ອຍ (ອຸດອມ)
11. ເມືອງ ພູກູວຽນ (ຢູ່ເໜືອວຽງຈັນ)
12. ເມືອງ ສີແກ້ວ (ມະຫາສາລະຄາມ)
13. ເມືອງ ຊຽງໜຽນ (ມະຫາສາລະຄາມ)
14. ເມືອງ ຮ້ອຍເອັດ (ຮ້ອຍເອັດ).

ແຕ່ໃນລະຫວ່າງສະຕະວັດ ທີ 1 ເຖິງສະຕະວັດ ທີ 2 ນະຄອນລັດຕ່າງໆ ທີ່ສຳຄັນສະໄໝ ສີໂຄດຕະບອງ (ຫລື ສີໂຄດຕະບູນ) ມີຄື:

1. ນະຄອນລັດ ສີໂຄດຕະບູນ
2. ໜອງຫານຫລວງ
3. ໜອງຫານນ້ອຍ
4. ຈຸລະນີພິມມະທັດ
5. ອິນທະປັນຖະ
6. ຈັກກຸລຸນທະ
7. ສາເກດ (ຮ້ອຍເອັດ)



ວັດຖຸບູຮານສະໄໝ ສີໂຄດຕະບອງ ສົນລະປະ ອິນເດຍ (ສາສະໜາພາມ ຄົ້ນຄວ້າໃນທ້າຍປີ 2008 ທີ່ກ້ອງປາກເຊບັ້ງໄຟ ບ້ານ ໜອງເຮືອທອງ, ເມືອງ ໄຊບູລີ, ແຂວງ ສະຫວັນນະເຂດ. ສັນນິຖານວ່າ ແມ່ນ ໃນສະໄໝອານາຈັກ ສີໂຄດຕະບອງໄລຍະຕົ້ນ (ເປັນວັດຖຸທີ່ທຳດ້ວຍຄຳ ແລະ ເງິນທັງນັ້ນ ມີອາຍຸ ປະມານ 1500 ປີ)

ຮອດສະຕະວັດທີ1, ນະຄອນລັດສາເກດ ແລະ ກຸລຸນທະນະຄອນ ໄດ້ຖືກທ້ອນໂຮມເຂົ້າ ເປັນອັນດຽວ ໂດຍພາຍໃຕ້ການນຳຂອງລັດສາເກດ ແລະ ກຸລຸນທະນະຄອນ ອັນມີ ເຈົ້າ ສຸລິຍະ ວົງສາ ສິດທິເດດ ເປັນເຈົ້າຄອງນະຄອນ, ກຸລຸນທະນະຄອນນັ້ນ ຕັ້ງຢູ່ທາງທິ່ງພຽງແມ່ນ້ຳເຈົ້າພະ ຍາ ຊຶ່ງເປັນດິນແດນທີ່ອຸດົມສົມບູນ ແລະ ທັງເປັນເມືອງທ່າທາງທະເລ. ສ່ວນນະຄອນສາເກດ ຊຶ່ງຕັ້ງຢູ່ທິ່ງພຽງ ລະຫວ່າງ ນ້ຳມູນ ແລະ ນ້ຳຊີ ກໍກາຍເປັນລັດ ທີ່ມີອຳນາດເຂັ້ມແຂງ ທາງການ ເມືອງ ແລະ ການທະຫານ ເຈົ້າ ສຸລິຍະວົງສາ ສິດທິເດດ ໄດ້ທ້ອນໂຮມເອົານະຄອນລັດອື່ນໆ ເຂົ້າກັນ ແລ້ວສະຖາປະນາເປັນມະຫາອານາຈັກ ສີໂຄດຕະບອງຂຶ້ນ ໂດຍມີເມືອງຫລວງ ຢູ່ທີ່ ຮ້ອຍເອັດປະຕູ.

ອານາເຂດຂອງອານາຈັກສີໂຄດຕະບອງ ສະໄໝນີ້ ທາງທິດເໜືອ ຕິດກັບມົນທົນ ຢູນານ ຊຶ່ງເປັນອານາຈັກ ໜອງແສ ຂອງຊາດອ້າຍລາວ, ເຜົ່າລາວຈົກ ແລະ ເຜົ່າລາວໂມ; ທາງທິດຕາ ເວັນອອກສ່ຽງເໜືອ ຕໍ່ເຂດຊາຍແດນຫວຽດນາມ (ຕົງແກ) ທີ່ແດນພູສາມເສົ້າ ນ້ຳເຕົ້າສາມ ແຄວ; ທິດຕາເວັນອອກ ຕິດກັບເຂດແດນຈຳປາ ທີ່ສາຍພູຫລວງ, ທິດຕາເວັນຕົກ ຕິດກັບຝັ່ງທະ ເລອັນດາມັນ, ອ່າວເບັ້ງກອນ ແລະ ທິດໃຕ້ ຕິດກັບທະເລຈີນໃຕ້.



ເຄື່ອງຂັນໝາກ ໃນສະໄໝທ້າຍຂອງອານາຈັກ ສີໂຄດຕະບອງ (ສັດຕະວັດທີ 10).

ເມື່ອເຈົ້າ ສຸລິຍະວົງສາ ສິດທິເດດ ສຸລະຄົດແລ້ວ ອຳນາດຂອງອານາຈັກ ສີໂຄດຕະບອງ ກໍອ່ອນແອລົງ, ໃນລະຫວ່າງສະຕະວັດ ທີ 3 ອານາຈັກສີໂຄດຕະບອງ ທັງໝົດໄດ້ຕົກເປັນເມືອງ ຂຶ້ນຂອງອານາຈັກ ຟູນັນ ອັນຕັ້ງຢູ່ທີ່ງພຽງ ແມ່ນ້ຳຂອງ ຕອນໃຕ້ ທີ່ເປັນປະເທດ ກຳປູເຈຍ ປະຈຸບັນ. ແຕ່ລ່ວງມາເຖິງສະຕະວັດທີ 5 ຫລັງຈາກອານາຈັກ ຟູນັນ ເສື່ອມອຳນາດລົງແລ້ວ ອານາຈັກສີໂຄດຕະບອງ ກໍໄດ້ປະກາດຕົນເປັນເອກະລາດ ໂດຍມີເມືອງຫລວງທີ່ ວຽງໄມ້ຮວກ ຊຶ່ງຢູ່ພາຍໃຕ້ການນຳພາຂອງ ເຈົ້າ ສຸມິດຕະ ທຳມະວົງສາ ໃນໄລຍະນີ້ ສີໂຄດຕະບອງ ກໍກາຍເປັນ ລັດ ທີ່ມີອຳນາດອີກເທື່ອໜຶ່ງ, ພະອົງໄດ້ທ້ອນໂຮມເອົາອານາຈັກນ້ອຍຕ່າງໆ ຕາມທີ່ງພຽງແມ່ນ້ຳຂອງ ຕອນກາງ ໃຫ້ເປັນອັນໜຶ່ງອັນດຽວກັນ, ອານາຈັກ ສີໂຄດຕະບອງ ໃນສະໄໝນີ້ ມີເຂດ ແດນ ກວ້າງຂວາງ, ຄື: ທິດເໜືອ ຕິດກັບ ຢູນານ ອັນເປັນອານາຈັກໜອງແສ, ທິດຕາເວັນ ອອກ ສ່ຽງເໜືອ ຕິດກັບ ຕົ້ງແກ ທີ່ພູສາມເສົ້າ ນ້ຳເຕົ້າສາມແຄວ, ທິດຕາເວັນອອກ ຕິດກັບແດນຈຳ ປາ ທີ່ສາຍພູຫລວງ, ທິດໃຕ້ ຕິດກັບປະເທດ ເຈນລະ (ກຳປູເຈຍ) ທີ່ຫລີ່ຜີ, ທິດຕາເວັນຕົກ ຕິດ ກັບ ເຂດແດນທະວາລະວະດີ ຊຶ່ງເປັນອານາຈັກໜຶ່ງ ທີ່ທົ່ງພຽງແມ່ນ້ຳເຈົ້າພະຍາ.

ໃນສະໄໝນີ້ໄດ້ມີການສ້າງເມືອງ ວຽງຈັນ ຂຶ້ນໂດຍຊາດອ້າຍລາວ ແຫ່ງອານາຈັກຟູລ້ຽວ ຫລື ສີໂຄດຕະບອງ ພາຍໃຕ້ການນຳພາຂອງບູລີຈັນ, ເປັນຊາວນາຊຶ່ງເປັນຄົນທີ່ສະຫລາດຫລັກ ແຫລມ ແລະ ມີຄວາມສາມາດໃນການບຳບັດທຸກບຳລຸງສຸກແກ່ປະຊາຊົນ. ດັ່ງນັ້ນ, ປະຊາຊົນ ຈຶ່ງໄດ້ຍົກເຂົາຂຶ້ນເປັນພໍ່ເມືອງ ຄືເຈົ້າຄອງນະຄອນວຽງຈັນ. ແຕ່ນັ້ນມາ ວຽງຈັນ ຈຶ່ງມີຊື່ຜາກົດໃນ ປະຫວັດສາດ, ແຕ່ຈີນເອີ້ນອານາຈັກສີໂຄດຕະບອງ ໃນສະໄໝນີ້ວ່າ " ວັນຕັນ " ກໍຄືງແມ່ນວຽງ ຈັນ ນີ້ເອງ.

ຈາກນັ້ນມາ ອານາຈັກສີໂຄດຕະບອງ ກໍຍັງຄົງດຳລົງເປັນລັດ ທີ່ມີອຳນາດ ແລະ ເປັນເອ ກະລາດ ມາໄດ້ຫລາຍສະຕະວັດ ມີຊື່ສຽງວ່າ ເປັນດິນແດນ ທີ່ອຸດົມສົມບູນ ໄປດ້ວຍເງິນ, ຄຳ ແລະ ນໍ ຫລື ງາອ່ອນ (ນໍແຮດ), ມີການຄ້າຂາຍຕິດຕໍ່ກັບຈີນ ແລະ ຕົ້ງແກ (ດ້າຍຫວຽດ), ເສັ້ນທາງຕິດຕໍ່ທຳມາຄ້າຂາຍ ໃນສະໄໝບູຮານນັ້ນ ແມ່ນຈາກ ເມືອງ ທ່າແຂກເກົ່າ ເມັ່ງໃສ່ ເມືອງ ວິນ ຝັ່ງທະເລຫວຽດນາມ.

ປະຫວັດສາດຈີນ ສະໄໝລາຊະວົງຖັງ (ປີ 618 - 907) ໄດ້ເວົ້າເຖິງອານາຈັກນີ້ ໃນ ນາມ ວຽງຈັນ ຫລື ວັນຕັນ ໃນສະໄໝນີ້ ອາດຈະແມ່ນກົກສັກດິນາວຽງຈັນ ມີອຳນາດຂຶ້ນແທນ ວຽງໄມ້ຮວກ. ອານາຈັກນີ້, ມີຄວາມກວ້າງ ປະມານ 350 ກລມ (7000 ລີ້) ແລະ ກ່າວວ່າອາ ນາຈັກ ວັນຕັນ ມີຊື່ໜຶ່ງວ່າຟູລ້ຽວ. ປະຊາຊົນຂອງອານາຈັກນີ້ ມີ 2 ຊົນເຜົ່າໃຫຍ່ໆ ຄື: ລາວລຸ່ມ ແລະ ຂອມ, ພໍ່ຄ້າຈີນ ໄດ້ເດີນທາງມາຍັງອານາຈັກ ຟູລ້ຽວ ຫລື ວັນຕັນ ໃນລະຫວ່າງປີ 705 -

706 ໄດ້ເວົ້າວ່າ ເຂົາໄດ້ມາຮອດ ເມືອງ ສວນໄຕ້ ຊຶ່ງຢູ່ເຂດໃຕ້ ຂອງອານາຈັກ ຟູລ້ຽວ ອັນມີອາ ນາເຂດຕິດກັບຊາຍແດນເຈນລະ (ກຳປູເຈຍ) ທາງທິດໃຕ້, ສ່ວນຊາຍແດນດ້ານເໜືອ ຕິດກັບ ອານາຈັກໜອງແສ (ຢູນ~ານ).

ໃນປີ 722 ອານາຈັກ ວັນຕັນ ຫລື ຟູລ້ຽວ ໄດ້ເຂົ້າຮ່ວມສົງຄາມກັບ ຕົງແກງ ຕໍ່ຕ້ານກອງ ທັບຈີນ ຜູ້ປົກຄອງຈຽວ - ຈູ (ຕົງແກງ), ແຕ່ໄດ້ຮັບຄວາມພ່າຍແພ້, ເວລາຕໍ່ມາໄດ້ຂອດສຳພັນ ທະໄມຕີກັບຈີນຄືນໃໝ່ ໂດຍສົ່ງທູດໄປຍັງລາຊະສຳນັກຈີນ ໃນປີ 750 ແລະ 753 ເຖິງປີ 757 ຈີນ ໄດ້ສົ່ງທູດມາໃນງານປົງສົບ ຂອງກະສັດວັນຕັນ ແລະ ໃນປີ 779 ທູດອານາຈັກ ວັນຕັນ ນຳ ໂດຍ ພູມີ ໄດ້ໄປຍັງລາຊະສຳນັກຈີນ ກະສັດອົງສຸດທ້າຍ ຂອງອານາຈັກ ຟູລ້ຽວ ຫລື ສີໂຄດຕະ ບອງ ມີນາມວ່າ ລຸດຖະລາຊາ ຊຶ່ງເປັນກະສັດທີ່ອ່ອນແອ ຈຶ່ງໄດ້ເສຍເມືອງໃຫ້ແກ່ມະຫາອານາ ຈັກ ກຳປູເຈຍ ຫລື ຂອມ ໃນສະຕະວັດທີ 9 ຊຶ່ງແມ່ນໄລຍະທີ່ຂອມເຮືອງອຳນາດ.

ພາຍຫລັງທີ່ ເຈົ້າ ໄຊຍະວໍລະມັນ ທີ 7 ແຫ່ງ ກຳພູຊາ ຫລື ຂອມ ເສຍຊີວິດໄປແລ້ວ, ອຳ ນາດ ຂອມ ທີ່ນະຄອນ ອັງກໍທົມ ກໍຄ່ອຍເສື່ອມລົງຕາມລຳດັບ ຈີນບໍ່ສາມາດຄວບຄຸມບັນດາ ເມືອງຂຶ້ນຂອງຕົນໄວ້ໄດ້, ບັນດານະຄອນລັດຕ່າງໆ ຂອງຂອມ ລວມທັງ ເມືອງ ຊວາ ດ້ວຍ ກໍ ແຍກຕົວເປັນເອກະລາດໄດ້ຢ່າງສົມບູນ. ນະຄອນລັດ ທີ່ປະກາດແຍກເປັນເອກະລາດ ໃນປະ ເທດລາວ ສະໄໝ ຂອມ ໄດ້ເສື່ອມອຳນາດລົງ ແຕ່ສະຕະວັດທີ 10 ເຖິງ 13 ນັ້ນ ມີເມືອງສຳຄັນ ຄື: ວຽງຈັນ, ວຽງກະບອງ, ເມືອງ ເຈັດວຽງ ເປັນຕົ້ນ:

ອານາຈັກຟູລ້ຽວ ຫລື ສີໂຄດຕະບອງ ໃນສະໄໝເຮືອງອຳນາດ ໄດ້ແບ່ງການປົກຄອງ ອອກເປັນ 6 ເຂດ ຄື:

ເຂດສິບສອງຈຸໄທ ມີເມືອງ ແຖງ ເປັນສູນກາງ.

ເຂດເມືອງ ຊວາ ລ້ານຊ້າງ ມີເມືອງ ຊວາ ເປັນສູນກາງ.

ເຂດວຽງຈັນ ມີວຽງຈັນ ເປັນສູນກາງ

ເຂດຮ້ອຍເອັດ ມີເມືອງ ຮ້ອຍເອັດ ເປັນສູນກາງ


ເຂດເມືອງຫລວງ ມີ ວຽງໄມ້ຮວກ ເປັນທີ່ປະທັບຂອງກະສັດ (ຮ້ອຍເອັດປະຕູ) ເຂດປະ ກັນມີ ເມືອງ ຊຽງຂວາງ ເປັນສູນກາງ.

ນັບແຕ່ສະຕະວັດທີ XIV ຄືນຫລັງນັ້ນ ປະຫວັດສາດ ນະຄອນຫລວງວຽງຈັນ ບໍ່ໄດ້ກ່າວ ໄວ້ຢ່າງຕໍ່ເນື່ອງກັນ ຄື: ພາຍຫລັງທີ່ບູລີຈັນ ໄດ້ສ້າງຕັ້ງເມືອງວຽງຈັນ ໃນລະຫວ່າງປີ 307 ມານັ້ນ ແລ້ວ, ກໍບໍ່ເຫັນໄດ້ບອກວ່າ ມີໃຜແດ່ ໄດ້ເປັນເຈົ້າເມືອງສືບຕໍ່ມາ ແລະ ສະພາບເມືອງ ວຽງຈັນ ເປັນຄືແນວໃດແທ້ກໍບໍ່ມີຜູ້ບັນທຶກໃຫ້ຮູ້ລະອຽດ, ຫລັງຈາກນັ້ນມາປະມານ 900 ກວ່າປີ ຄື: ແຕ່

ສະຕະວັດ ທີ VI ແຫ່ງຄຣິດຕະສັກກຣາດ ຈຶ່ງໄດ້ເຫັນຊື່ ເມືອງ ວຽງຈັນ ນອນຢູ່ໃນຈຳນວນ 17 ຕົວເມືອງ ທີ່ຂຶ້ນກັບອານາຈັກສີໂຄດຕະບອງ ຄື:

ເມືອງ ວຽງຈັນ	(ນະຄອນຫລວງວຽງຈັນ ປະຈຸບັນ)
ເມືອງ ວຽງຄຳ	(ເມືອງ ເກົ່າ ແຂວງ ວຽງຈັນ ປະຈຸບັນ)
ເມືອງ ຜານ້ຳຮຸ່ງ	(ປາກກະດິງ)
ເມືອງ ສາມແຫ	(ປາກນ້ຳເຊບັ້ງໄຟ)
ເມືອງ ສີໂຄດ	(ທ່າແຂກປະຈຸບັນ)
ເມືອງ ຈຳປາມະຄີລີ	(ສຸວັນນະຄີລີ, ແຂວງ ຈຳປາສັກ ປັດຈຸບັນ)
ເມືອງ ປາກກະບອງ	(ອຸບົນ ປະເທດໄທປະຈຸບັນ)
ເມືອງ ຕາແມນ	(ແຂວງ ສຸວັນນະພູມ - ປະເທດໄທ)
ເມືອງ ຟ້າແດດ	(ແຂວງ ກາລະສິນ - ໄທ)
ເມືອງ ພູພານ	(ແຂວງ ອຸດອນ - ໄທ)
ເມືອງ ບົວບານ	(ແຂວງ ໜອງຄາຍ - ໄທ)
ເມືອງ ໜອງຫານຫລວງ	(ແຂວງ ສະກົນນະຄອນ -ໄທ)
ເມືອງ ໜອງຫານນ້ອຍ	(ແຂວງ ອຸດອນ -ໄທ)
ເມືອງ ສີແກ້ວ	(ແຂວງ ມະຫາສາລະຄາມ)
ເມືອງ ຊຽງໜຽນ	(ແຂວງ ມະຫາສາລະຄາມ)
ເມືອງ ຮ້ອຍເອັດ ປະຕູ	(ແຂວງ ຮ້ອຍເອັດ)
ເມືອງ ມະຣຸກຂະນະຄອນ	(ແຂວງ ນະຄອນພະນົມ).

ຕົກມາຮອດ ສະຕະວັດທີ VIII ເມືອງ ວຽງຈັນ ໄດ້ຖືກສະຖາປະນາ ເປັນນະຄອນຫລວງ ຂອງອານາຈັກສີໂຄດຕະບອງ ຈົນມາຮອດສະຕະວັດທີ XI. ຈາກນັ້ນ, ຊາວຂອມແຫ່ງນະຄອນ ທົມ (ປະເທດ ຂະເໝນ) ໄດ້ແຜ່ອຳນາດຂຶ້ນມາຄອບຄອງອານາຈັກ ສີໂຄດຕະບອງ ຈົນຮອດ ສະຕະວັດທີ XIII ຊາວຂອມ ຈຶ່ງເສື່ອມອຳນາດລົງ. ຕະຫລອດໄລຍະທີ່ເມືອງ ວຽງຈັນ ໄດ້ຂຶ້ນຢູ່ ກັບອານາຈັກສີໂຄດຕະບອງ ຄືແຕ່ສະຕະວັດທີ VI - XII ໃນປະຫວັດສາດ ບໍ່ໄດ້ບອກແຈ້ງວ່າມີ ໃຜແດ່ ໄດ້ເປັນເຈົ້າເມືອງມາແຕ່ລະໄລຍະ, ຈົນຕົກມາຮອດ ສະຕະວັດທີ XIV ຄືປີ 1356 ໃນ ລາຊະການຂອງ ເຈົ້າ ຟ້າງຸ່ມ ຈຶ່ງເຫັນກ່າວໄວ້ວ່າ: ໃນເວລາທີ່ ເຈົ້າ ຟ້າງຸ່ມ ມາຕີເມືອງ ວຽງຈັນ ແລະ ເມືອງ ວຽງຄຳ ນັ້ນຈຶ່ງຮູ້ວ່າຜູ້ເປັນເຈົ້າເມືອງໃນເວລານັ້ນ ແມ່ນທ້າວ ຊຽງມຸງ.



ເຂດແດນອານາຈັກລາວລ้ານช้าง ສะໄໝ ເจ้า ฟ้างุ่ม ມะหาลาด

3. ເມືອງວຽງຈັນ ໃນສະໄໝອານາຈັກ ລາວລ້ານຊ້າງ ກ່ອນປີ 1560.

ເຊື້ອຊາດລາວ ໄດ້ຟື້ນຕົວຂຶ້ນໃໝ່ຢູ່ໃນດິນແດນ ສຸວັນນະພູມ ປະເທດ ຕອນທີ່ເປັນອານາເຂດ ນະຄອນ ຫລວງພະບາງ ທຸກວັນນີ້ ຕັ້ງແຕ່ຂຸນລໍ ແລະ ສືບຕໍ່ຈາກນັ້ນມາກໍມີກະສັດລາວ ໄດ້ສະເຫວີຍຣາຊະສົມບັດ ໃນນະຄອນຊຽງທອງ ປົກຄອງໄພ່ຟ້າ ປະຊາກອນ ມີຄວາມຢູ່ເຢັນເປັນສຸກ ມາເຖິງ 22 ອົງ ຈົ່ງຮອດ ເຈົ້າ ຟ້າງຸ່ມ. ກະສັດ ອົງທີ 22 ນັ້ນ ມີນາມວ່າ ເຈົ້າ ຟ້າງົ້ວ ຊຶ່ງໃນຕຳນານບາງຜູກນັ້ນ ເອີ້ນວ່າ ຂຸນຜີຟ້າ. ເຈົ້າ ຟ້າງົ້ວ ເປັນຣາຊະໂອຣົດ ຂອງ ເຈົ້າ ຟ້າຫງວໂງ່ມ ຫຼື ສຸວັນນະຄຳຜົງ. ເມື່ອພະບິດາສຸຣະຄົດແລ້ວ ເຈົ້າ ຟ້າງົ້ວ ກໍໄດ້ສະເຫວີຍຣາຊະສົມບັດແທນ. ເຈົ້າ ຟ້າງົ້ວ ມີພະຣາຊະໂອຣົດ ແລະ ຣາຊະທິດາ ຮວມທັງໝົດ 4 ອົງເປັນຊາຍ 2 ອົງ, ອົງຫຼ້ານັ້ນ ແມ່ນເຈົ້າຟ້າງຸ່ມ.

ເຈົ້າ ຟ້າງຸ່ມ ປະສູດ ປີມະໂລງ ປີ 1316, ພຣະອົງເປັນຣາຊະໂອຣົດຂອງ ເຈົ້າ ຟ້າງົ້ວ ແລະ ຂຶ້ນສະເຫວີຍຣາຊະສົມບັດ ໃນປີ 1353 ພາຍຫລັງທີ່ຢຶດເອົານະຄອນຊຽງທອງ ແລະ ພະອົງສຳເລັດການທ້ອນໂຮມ ອານາຈັກລາວລ້ານຊ້າງ ເປັນເອກະພາບ ໃນປີ 1357.

ທີ່ຕັ້ງ ແລະ ອານາເຂດ ຂອງອານາຈັກລາວລ້ານຊ້າງບູຮານ ມີເນື້ອທີ່ກວ້າງຂວາງທີ່ສຸດ, ທິດໃຕ້ ຕິດກັບ ປະເທດ ຂະເໝນ (ກຳປູເຈຍ), ທິດຕາເວັນອອກ ຕິດກັບ ປະເທດ ດ້າຍຫວຽດ (ຫວຽດນາມ), ທິດເໜືອ ຕິດກັບ ປະເທດຈີນ, ທິດຕາເວັນຕົກ ຕິດກັບອະຍຸທະຍາ (ໄທ) ແລະ ຫົງສາວະດີ (ມຽນມາ), ຫລື ອາດຈະເປັນເຂດແດນເກົ່າ ຂອງອານາຈັກສີໂຄດຕະບອງ ຊຶ່ງລວມມີ 17 ຫົວເມືອງ, ໃນນັ້ນມີເມືອງ (ນະຄອນ) ວຽງຈັນ. ສ່ວນນະຄອນວຽງຈັນ ໃນສະໄໝນັ້ນ ກໍອາດມີແຕ່ 5 ເມືອງນ້ອຍ ຂຶ້ນກັບການປົກຄອງຂອງຕົນ ຄື: ເມືອງ ຈັນທະບູລີ, ສີສັດຕະນາກ, ຫາດຊາຍຟອງ, ສີໂຄດຕະບອງ ແລະ ໄຊເຊດຖາ.



ເຈົ້າຟ້າງຸ່ມ ຜູ້ທ້ອນໂຮມອານາຈັກລາວລ້ານຊ້າງ ເປັນເອກະພາບໃນປີ 1356


- ເຈົ້າຟ້າງຸ່ມ ເຄື່ອນໄຫວທ້ອນໂຮມຫົວເມືອງຕ່າງໆ ເຂົ້າເປັນອານາຈັກລາວລ້ານຊ້າງ ເອ ກະພາບແຕ່ ປີ 1349 ຫາ ປີ 1357.

ຍ້ອນສະພາບການຢູ່ ແຫລມສຸວັນນະພູມ ກ່ອນການທ້ອນໂຮມລາວລ້ານຊ້າງ ຂອງເຈົ້າ ຟ້າງຸ່ມ ໃນເວລານັ້ນ ໄດ້ເກີດມີການຜັນແປໄປຢ່າງຮ້າຍແຮງ. ບັນດາລັດ ຊຶ່ງແຕ່ກ່ອນເຄີຍຢູ່ໃຕ້ ອຳນາດການປົກຄອງຂອງ ຂະເໝນ (ຂອມ) ເປັນຕົ້ນ: ອັງກໍທົມ ໄດ້ເຄື່ອນໄຫວບໍ່ຍອມຂຶ້ນກັບ ຂະເໝນອີກ ແລະ ພະຍາຍາມຕັ້ງຕົນເປັນເອກະລາດ ແບບພໍໃຜພໍລາວ ທີ່ເອີ້ນກັນວ່າ ສັກດິນາ ບໍ່ທັນລວມສູນ. ພວກໄທສະຫຍາມ ທີ່ຢູ່ທາງທິດຕາເວັນຕົກ ທີ່ເລີ້ມມີກຳລັງລວມສູນ ສ່ວນໃດ ສ່ວນໜຶ່ງແລ້ວ ກໍບຸກເຂົ້າໃນເຂດແດນຂອງ ຂະເໝນ ຢ່າງໜັກໜ່ວງ. ຍ້ອນເຫດການພາຍໃນ ແລະ ພາຍນອກເປັນຄືແນວນັ້ນ ໄດ້ສ້າງເງື່ອນໄຂອັນດີໃຫ້ແກ່ ເຈົ້າ ຟ້າງຸ່ມ ໃນການເຕົ້າໂຮມບັນ ດາຫົວເມືອງລາວບູຮານ ທີ່ຕັ້ງຢູ່ທັງສອງຝັ່ງໂຫລ້ງແມ່ນ້ຳຂອງນັ້ນ ເຂົ້າເປັນອານາຈັກໜຶ່ງດຽວ ທີ່ ມີຄວາມເປັນເອກະລາດ ແລະ ເປັນລະບອບສັກດິນາລວມສູນ. ສະພາບຢູ່ເມືອງຊວາ, ຄືພະຍາ ຂຸນຜີຟ້າ ຖືກໂຄ່ນລົ້ມ ແລະ ໄດ້ເສຍຊີວິດໄປ ຍ້ອນຜູ້ເປັນນ້ອງຊາຍ ທີ່ມີນາມວ່າ ເຈົ້າ ຄຳຮຽວ ອາວຂອງ ເຈົ້າ ຟ້າງຸ່ມ.

ໃນເວລາດຽວກັນນັ້ນ, ຢູ່ເມືອງວຽງຈັນ ແມ່ນເຖົ້າຊຽງມຸງ ຫລື ຊຽງເຫລັກ ເປັນຜູ້ປົກຄອງ ແລະ ມີລູກຊາຍຜູ້ໜຶ່ງຊື່ວ່າ ທ້າວ ເພົ້າ ໄດ້ຖືກສົ່ງໄປປົກຄອງ ເມືອງ ວຽງຄຳ ເຂດທົ່ງພຽງໂຫລ້ງ ນ້ຳງື່ມ ປະມານ 60 ກິໂລແມັດ ໄປທາງທິດເໜືອ ຂອງນະຄອນວຽງຈັນ ແລະ ກໍເປັນຈຸດທີ່ສອງ ຂອງບັນດາເມືອງໃຫຍ່ ຮອງຈາກລ້ານນາ (ຊຽງແສນ) ທີ່ເຈົ້າຟ້າງຸ່ມ ມີແຜນໄວ້ກ່ອນແລ້ວ ເພື່ອ ຕີເອົາເຂົ້າໃນອານາຈັກລ້ານຊ້າງ (ເມືອງ ຊວາ).

ມາເຖິງ ປີ 1351, ຫລັງຈາກໄດ້ຊ່ວຍ ຂະເໝນ ບຸກຕີຢຶດເອົາ ອັງກໍທົມ ສຳເລັດແລ້ວ ເຈົ້າ ຟ້າງຸ່ມ ພ້ອມດ້ວຍພະຊາຍາ (ເມຍ) ຊື່ ນາງ ແກ້ວເກງຍາ ຊຶ່ງເປັນທິດາຂອງເຈົ້າຊີວິດຂະ ເໝນ ແລະ ພັກພວກ ປະກອບດ້ວຍກຳລັງ ປະມານ 10.000 ຄົນ ກໍໄດ້ເລີ່ມຕົ້ນເຄື່ອນທັບອອກ ຈາກບໍລິເວນເຂົາພະວິຫານ ທາງທິດເໜືອ ຂອງນະຄອນ ອັງກໍທົມ (ປະເທດ ຂະເໝນ) ໂດຍ ຂໍຜ່ານເຂົ້າ ເຂດການປົກຄອງຂອງ ພະຍາ ພິມມະທັດ ຊຶ່ງມີສູນກາງຕັ້ງຢູ່ທີ່ພິມາຍ (ປະເທດ ໄທ ປະຈຸບັນ) ທາງທິດຕາເວັນຕົກ ຂອງວັດພູຈຳປາສັກ, ເຂດປົກຄອງຂອງ ພະຍາ ພິມມະທັດ ນີ້ກໍເປັນນະຄອນໜຶ່ງ ປະກອບດ້ວຍຫລາຍຫົວເມືອງນ້ອຍຂຶ້ນກັບ, ເຊັ່ນ: ເມືອງ ປາກົບ, ເມືອງ ກຸນຊອນ, ເມືອງ ດອນ ແດງ, ເມືອງ ກຳແພງ, ເມືອງ ໂສກ, ເມືອງ ຄ້ອງຫອງ, ເມືອງ ຈັນທ້ອມ ແລະ ເມືອງ ອ້າຍ. ເມື່ອກຳລັງຂອງ ເຈົ້າ ຟ້າງຸ່ມ ໄດ້ມາຮອດແລ້ວ ແຕ່ພະຍາ ພິມມະທັດ ບໍ່ໃຫ້ ຜ່ານ ຈຶ່ງໄດ້ເກີດການສູ້ຮົບກັນຢ່າງດຸເດືອດ, ສຸດທ້າຍເຈົ້າ ຟ້າງຸ່ມ ກໍຢຶດເອົາແຄວ້ນ ພິມມະທັດ

ໄດ້ຢ່າງມີໄຊ; ຈາກນັ້ນ ກໍໄດ້ເຄື່ອນທັບເຂົ້າເຂດ ສະຫວັນນະເຂດ ຊຶ່ງແຕ່ກ່ອນບາງບ່ອນແມ່ນ ຂຶ້ນກັບອານາຈັກສີໂຄດຕະບອງ, ໃນເມື່ອກ່ອນເປັນອານາຈັກທີ່ເຂັ້ມແຂງ, ມີອານາເຂດທີ່ກວ້າງ ຂວາງ ເອີ້ນວ່າ: " ອານາຈັກກະບອງ ຫລື ສີໂຄດຕະບອງ ແລະ ສີໂຄດຕະບູນ ໃນຕໍ່ມາໃນຕົ້ນ ສະຕະວັດທີ14 ເປັນເມືອງລູກຫລວງຂອງ ເມືອງ ຊວາ (ຫລວງພະບາງ), ມີຜູ້ປົກຄອງ ຊື່ວ່າ ຣາມບັນດິດ. ແຕ່ມາໃນກາງສະຕະວັດທີ 14, ອານາຈັກສີໂຄດຕະບອງ ໄດ້ແບ່ງອອກເປັນ 3 ແຄ້ວນແລ້ວ ຄື: ແຄ້ວນກະບອງ, ແຄ້ວນຈຳປາສັກ ແລະ ແຄ້ວນເຈັດວຽງ (ຕັ້ງຢູ່ບໍລິເວນ ນ້ຳຫີນ ບູນ ແລະ ນ້ຳກະດິງ).



ເຈົ້າຟ້າງຸ່ມ ທ້ອນໂຮມລາວ ປີ 1353.

ຍ້ອນເຫດຜົນດັ່ງກ່າວ, ເຈົ້າຟ້າງຸ່ມຈຶ່ງເຂົ້າຕີເອົາແຄ້ວນເຫລົ່ານັ້ນໄດ້ຢ່າງງ່າຍດາຍ, ພ້ອມກັນນັ້ນ ກໍເກັບເກນເອົາກຳລັງທີ່ກ້າຫານທັງຊາຍ ແລະ ຍິງ ປະກອບເຂົ້າຢູ່ໃນກອງທັບ ໃຫ້ໄດ້ເປັນຈຳນວນພຽງພໍ, ພ້ອມທັງກຳລັງຊ້າງ, ມ້າ ແລະ ສະບຽງອາຫານ ໃຫ້ຫລວງຫລາຍ ເພື່ອສືບຕໍ່ຕີເອົາຫົວເມືອງອື່ນໆອີກ. ພາຍຫລັງທີ່ໄດ້ຈັດລະບຽບບ້ານເມືອງຢູ່ 3 ແຄ້ວນ ນັ້ນເປັນທີ່ຮຽບຮ້ອຍແລ້ວ, ເຈົ້າຟ້າງຸ່ມ ກໍໄດ້ຍົກພົນຂຶ້ນໄປຕີເອົາແຄ້ວນວຽງຜານ (ຊຽງສາ) ຊຶ່ງຕັ້ງຢູ່ບໍລິເວນ ສອງຝັ່ງໂຫລ້ງແມ່ນ້ຳຂອງ ລະຫວ່າງນ້ຳກະດິງ, ນ້ຳຊັນ ແລະ ນ້ຳງຶບ, ທິດຕາເວັນອອກ ຕິດກັບ

ຊາຍແດນ ເມືອງ ພວນຊຽງຂວາງ ແລະ ແດນຫວຽດນາມ, ທິດຕາເວັນຕົກ ຕິດກັບເມືອງ ໜອງ ຫານ, ທິດໃຕ້ຕິດກັບແຄວ້ນເຈັດວຽງ, ທິດເໜືອຕິດກັບວຽງຈັນ, ວຽງຄຳ... ແຄວ້ນນີ້ ກໍປະກອບມີ ຫລາຍເມືອງຂຶ້ນກັບ, ເຊັ່ນ: ເມືອງ ຜານ້ຳຮຸ່ງ (ເປັນເມືອງແມ່), ເມືອງ ຊຽງສາ, ເມືອງມອດ, ເມືອງ ນຽກ ພະຍາ ສາມຄ້ອນ. ເຈົ້າຄອງ ວຽງຜານ້ຳຮຸ່ງ ໄດ້ເກນກຳລັງພົນອອກສູ້ຮົບກັບກອງ ທັບ ເຈົ້າ ຟ້າງຸ່ມ. (ຕາມໜັງສື ຂຸນບູລົມ ກ່າວວ່າ: ມີກຳລັງພົນ ເຖິງ 400.000 ຄົນ, ຊ້າງເສິກ 500 ຕົວ, ມ້າເສິກ ເປັນຈຳນວນຫລວງຫລາຍ. ສ່ວນເຈົ້າ ຟ້າງຸ່ມ, ໄດ້ແຕ່ງໃຫ້ ບາຈີ່ແຂ້ ເອົາກຳ ລັງເຂົ້າສູ້ຮົບ) ເຖິງທີ່ສຸດກຳລັງຂອງ ພະຍາ ສາມຄ້ອນ ໄດ້ຍອມຈຳນົນຂຶ້ນກັບ ເຈົ້າ ຟ້າງຸ່ມ.

ຈາກນັ້ນ ເຈົ້າ ຟ້າງຸ່ມ ກໍໄດ້ແຕ່ງກຳລັງໄປຕີເອົາ ເມືອງ ປາກຊັນ ແລະ ເມືອງນ້ອຍອື່ນໆ ເພື່ອທ້ອນໂຮມກຳລັງພົນໃຫ້ພຽງພໍ ເພື່ອກຽມເອົາຫົວເມືອງໃຫຍ່ ເຊັ່ນ: ເມືອງ ວຽງຈັນ, ວຽງຄຳ, ຊຽງດົງ - ຊຽງທອງ. ດັ່ງນັ້ນ, ເຈົ້າ ຟ້າງຸ່ມ ຈຶ່ງໄດ້ຈັດຕັ້ງການສະຫລຸບບັນດາບັ້ນສູ້ຮົບ ຜ່ານມາ ແມ່ນເຫັນໄດ້ ເຖິງຄວາມສາມາດ ໃນການທ້ອນໂຮມເອົາ ບັນດາຫົວເມືອງນ້ອຍ ທາງພາກໃຕ້ ແລະ ເກັບເກນເອົາກຳລັງຊາຍ, ຍິງ, ຊ້າງ, ມ້າ ເຂົ້າເປັນກຳລັງສູ້ຮົບ ໄດ້ຢ່າງຫລວງຫລາຍ, ເພີ່ມ ຂຶ້ນຫລາຍໝື່ນຄົນ ແລະ ເຂັ້ມແຂງພໍທີ່ຈະຊັ່ງຊາກຳລັງກັບ ທ້າວ ຊຽງມຸ່ງ ທີ່ເມືອງ ວຽງຈັນ ແລະ ພະຍາ ເພົາ ທີ່ວຽງຄຳ ໄດ້ແລ້ວ. ແຕ່ເຈົ້າ ຟ້າງຸ່ມ ຍັງເຫັນໄດ້ວ່າ ກຳລັງຂອງວຽງຈັນ - ວຽງຄຳ ແມ່ນຍັງເຂັ້ມແຂງກວ່າຢູ່. ສະນັ້ນ, ເພື່ອເປັນການຕັດຮອນກຳລັງຝ່າຍກົງກັນຂ້າມ ຢູ່ຫົວເມືອງ ໃຫຍ່ລົງຕື່ມອີກ, ເຈົ້າຟ້າງຸ່ມ ຈຶ່ງໄດ້ຕັດສິນໃຈຕີເອົາບັນດາເມືອງນ້ອຍທາງທິດຕາເວັນອອກ, ທິດ ເໜືອທັງໝົດກ່ອນ ຈຶ່ງຫັນລົງມາຕີເອົາຫົວເມືອງໃຫຍ່ຕ່າງໆ ຕາມໂຫລ້ງແມ່ນ້ຳຂອງຕາມຫຼັງ.

ເມື່ອເຈົ້າ ຟ້າງຸ່ມ ຕີໄດ້ຫົວເມືອງທາງຝ່າຍເໜືອໝົດແລ້ວ, ພະອົງກໍໄດ້ແຕ່ງຕັ້ງ ບາຈີ່ມ (ແມ່ທັບໃຫຍ່ຂອງເຈົ້າ ຟ້າງຸ່ມ) ເປັນໝື່ນຂວາປົກຄອງບັນດາຫົວເມືອງທັງໝົດ ທາງຝ່າຍເໜືອ ລວມທັງແຄວ້ນສິບສອງຈຸໄທອີກດ້ວຍ. ໃນເວລານັ້ນ, ພະມ້າ ແລະໄຕໂມ ຫລື ໄທໂມ ກຳລັງຂັດ ແຍ້ງກັນເປັນໃຫຍ່. ດ້ວຍເຫດນັ້ນ, ເຈົ້າ ຟ້າງຸ່ມ ຈຶ່ງແຕ່ງຕັ້ງ ບາຈີ່ມ ຊຶ່ງເປັນແມ່ທັບທີ່ເຂັ້ມແຂງທີ່ ສຸດເປັນຜູ້ປົກຄອງ. ເມື່ອຈັດລະບຽບການບ້ານເມືອງ ທາງຝ່າຍເໜືອເປັນທີ່ຮຽບຮ້ອຍແລ້ວ, ເຈົ້າ ຟ້າງຸ່ມ ຈຶ່ງໄດ້ນຳເອົາກຳລັງພົນທັງໝົດ ລົງມາຕາມໂຫລ້ງແມ່ນ້ຳຂອງ ເພື່ອຕີຢຶດເອົາ ຊຽງດົງ - ຊຽງທອງ ຫລື ເມືອງ ຊວາ (ຫຼວງພະບາງ). ໃນເວລານັ້ນ, ພະຍາ ຄຳຮຽວ (ອາວເຈົ້າ ຟ້າງຸ່ມ) ເຈົ້າປົກຄອງ ເມືອງ ຊວາ ໄດ້ຍິນຂ່າວວ່າ ກອງທັບ ເຈົ້າ ຟ້າງຸ່ມ ໄດ້ມາຕັ້ງທັບຢູ່ ປາກອູ ກໍຕົກສະ ທ້ານຢ້ານກົວ ແລະ ໄດ້ສັ່ງທະຫານອອກໄປສູ້ຮົບ ແຕ່ກໍປະລາໄຊທັງໝົດ ແລ້ວໄພ່ຟ້າປະຊາ ກອນຕະຫລອດ ເຈົ້ານາຍ ສັກດິນາຂັ້ນສູງ ໄດ້ໄປ ອັງເຊີນ ເຈົ້າ ຟ້າງຸ່ມ ຂຶ້ນສະເຫວີຍລາດ ເມືອງ ຊວາ ລ້ານຊ້າງ ໃນປີ 1353.




ພາຫະນະຂົນສົ່ງ ທາງນ້ຳ

ພາຍຫລັງໄດ້ຂຶ້ນຄອງລາຊະສົມບັດແລ້ວ, ເຈົ້າ ຟ້າງຸ່ມ ກໍຟ້າວຈັດແຈງ ລະບຽບການບ້ານເມືອງຄົນໃໝ່ ໃຫ້ສອດຄ່ອງກັບຈຸດປະສົງຂອງພະອົງ, ເປັນຕົ້ນແມ່ນເພື່ອການຄຸ້ມຄອງແນວຄິດຈິດໃຈຂອງປະຊາຊົນ ໃນໄລຍະໃໝ່ໃຫ້ໄດ້ດີ, ພະອົງຈຶ່ງຊົງແຕ່ງຕັ້ງໜ້າທີ່ຕຳແໜ່ງ ໃຫ້ບັນດາຜູ້ທີ່ໄປຕິດຕາມພະອົງ ແລະ ຂ້າລາຊະການຜູ້ອື່ນໆ ຕາມທີ່ເໝາະສົມ.

ຫລັງຈາກສຳເລັດການປັບປຸງ ອຳນາດການປົກຄອງ ຢ່າງສົມບູນ ແລະ ໄດ້ປັບປຸງກຳລັງກອງທັບມາໄດ້ໜຶ່ງປີ, ເຈົ້າ ຟ້າງຸ່ມ ກໍໄດ້ສືບຕໍ່ຈຸດປະສົງ ໃນການທ້ອນໂຮມແຜ່ນດິນລ້ານຊ້າງ ໃຫ້ສຳເລັດບໍລິບູນ, ໂດຍເລີ່ມຕົ້ນຈາກການເຄື່ອນທັບໄປຕີເອົາບັນດາຫົວເມືອງໃຫຍ່ໆ ໄປຕີເອົາອານາຈັກລາວລ້ານນາ (ຊຽງແສນ) ໃນປີ 1354 (ຊຽງໃໝ່ ປະຈຸບັນ). ເມື່ອຕີໄດ້ບັນດາຫົວເມືອງທີ່ຢູ່ທາງທິດ ຕາເວັນຕົກສ່ຽງເໜືອໝົດແລ້ວ, ເຈົ້າຟ້າງຸ່ມ ກໍໄດ້ປັບປຸງຈັດລະບຽບການບ້ານເມືອງ ແລະ ກຳລັງທັບໃຫ້ສົມບູນໃນເວລາສອງປີ ຈຶ່ງໄດ້ກັບຄືນ ຊຽງດົງ - ຊຽງທອງ. ໃນເວລານັ້ນ, ພໍດີພະຊາຍາ ນາງ ແກ້ວເກງຍາ ປະສູດພະລາຊະໂອລົດແລ້ວ, ເສນາອາມາດທັງຫລາຍຈຶ່ງໃສ່ຊື່ວ່າ ທ້າວ ອຸ່ນເຮືອນ ຊຶ່ງມີອາຍຸໜຶ່ງປີພໍດີ. ເພື່ອສືບຕໍ່ຈຸດປະສົງທ້ອນໂຮມອານາຈັກລາວລ້ານຊ້າງ ພະອົງໄດ້ມີແຜນການຕີເອົາ ເມືອງ ວຽງຈັນ ແລະ ວຽງຄຳ ໃຫ້ໄດ້ກ່ອນແລ້ວ ຈຶ່ງຕີເອົາຫົວເມືອງຕ່າງໆ ທາງຝັ່ງຊ້າຍ ແລະ ຝັ່ງຂວາ ແມ່ນ້ຳຂອງຕໍ່ໄປ.

ເມື່ອກອງທັບ ເຈົ້າ ຟ້າງຸ່ມ ໄດ້ລົງມາພັກເຊົາຢູ່ ຊຽງດົງ - ຊຽງທອງ ໄລຍະໜຶ່ງແລ້ວ ເຈົ້າ ຟ້າງຸ່ມ ກໍໄດ້ມີຄຳສັ່ງໃຫ້ເຄື່ອນກອງທັບລົງສູ່ເມືອງວຽງຈັນ. ຊຶ່ງເປັນເປົ້າໝາຍສຳຄັນໃນການ ທ້ອນໂຮມເຂົ້າກັບ ເມືອງ ຊວາ, ແຕ່ວ່າຜ່ານໄລຍະເສັ້ນທາງນັ້ນຕ້ອງໄດ້ຕີເອົາ ເມືອງ ຊຽງຄານ ສາກ່ອນ ເພາະເປັນເມືອງຂອບດ່ານລະຫວ່າງ ຊຽງດົງ, ຊຽງທອງ ແລະ ວຽງຈັນ - ວຽງຄຳ, ບາງ ເທື່ອກໍເອີ້ນວ່າ ເມືອງຊ້າຍ ຫລື ດ່ານຊ້າຍ, ຊຶ່ງກົງກັນຂ້າມກັບ ເມືອງຂວາ ທີ່ຕັ້ງຢູ່ທາງທິດເໜືອ, (ເມືອງ ຊະນະຄາມ ປະຈຸບັນນີ້). ເມື່ອຕີເອົາ ເມືອງ ຊຽງຄານ ໄດ້ແລ້ວ, ເຈົ້າ ຟ້າງຸ່ມ ກໍໄດ້ແຕ່ງ ຕັ້ງ ບາໂບ ເປັນ ພະຍາ ເມືອງຊ້າຍ, ດຳລົງຍົດທາງທະຫານ ເອີ້ນວ່າ: " ໝື່ນຊ້ອຍ " ເປັນແມ່ທັບ ປົກຄອງ ເມືອງຊ້າຍ ຮັບຜິດຊອບເຂດນ້ຳແດນດິນທາງໃຕ້ສຸດຂອງ ເມືອງ ຊວາ.




ນະຄອນຊຽງທອງ

• ເມືອງວຽງຈັນ ໃນສະໄໝເຈົ້າ ຟ້າງຸ່ມ ທ້ອນໂຮມລາວເປັນເອກະພາບ.

ຈາກນັ້ນ, ເຈົ້າ ຟ້າງຸ່ມ ກໍໄດ້ນຳກຳລັງລົງເຖິງເຂດແດນ ຂອງເມືອງວຽງຈັນ ໃນປີ 1356 (ປີ 1989), ການທີ່ນຳກອງທັບຫລວງ ມາຕີເມືອງວຽງຈັນ ໃນຄາວນີ້, ພະອົງໄດ້ແຕ່ງຕັ້ງໃຫ້ ບາໂບ ກັບ ບາຈີ່ແຂ້ ເປັນທັບໜ້າ ມາທາງເມືອງຊ້າຍ (ເມືອງ ດ່ານຊ້າຍ). ຍ້ອນວ່າ, ເມືອງວຽງຈັນ ເປັນເມືອງທີ່ກວ້າງໃຫຍ່, ມີກຳລັງຫລາຍ ແລະ ເຂັ້ມແຂງກວ່າເມືອງອື່ນໆ, ໃນເວລານີ້ແມ່ນເຖົ້າ ຊຽງມຸງ ຫລື ຊຽງເຫລັກ ເປັນເຈົ້າປົກຄອງເມືອງ. ເມື່ອເຈົ້າຟ້າງຸ່ມ ໄດ້ນຳກອງທັບເຄື່ອນເຂົ້າມາ ຮອດຂອບເຂດເມືອງວຽງຈັນ ແລ້ວກໍໄດ້ຄົ້ນຄວ້າຈັດວາງກຳລັງເຂົ້າຕີເອົາ ເມືອງວຽງຈັນ ຢ່າງລະ ອຽດຖີ່ຖ້ວນ ຄື: ຈັດວາງກອງທັບຫລວງ (ກອງຫລັງ) ບັນຊາໂດຍ ເຈົ້າ ຟ້າງຸ່ມ ຕັ້ງຢູ່ຄໍແກ້ງ (ປະ

ມານ 12 ກິໂລແມັດ ໄປທາງເໜືອ ຂອງນະຄອນວຽງຈັນ) ແລະ ກອງທັບໜ້າພາຍໃຕ້ການບັນ ຊາຂອງບາໂບ ແລະ ບາຈີ່ແຂ້ ໃຫ້ເຄື່ອນທັບໄປຕັ້ງຢູ່ທ່ານາເໜືອ (ທາງທິດຕາເວັນຕົກ ຂອງ ບ້ານ ສີໄຄ ປະຈຸບັນ). ເມື່ອຂ່າວນີ້ໄດ້ຍິນໄປຮອດທ້າວ ຊຽງມຸ່ງ, ເຈົ້າຄອງເມືອງວຽງຈັນ ແລ້ວກໍ ຕົກໃຈຢ້ານກົວຈຶ່ງສົ່ງທູດໄປຍັງ ທ້າວ ເພົາ ຜູ້ເປັນລູກຊາຍປົກຄອງຢູ່ ເມືອງ ວຽງຄຳ ໃຫ້ມາຊ່ວຍ ກຽມປ້ອງກັນເມືອງວຽງຈັນ ຈົນເຕັມຄວາມສາມາດ, ສ່ວນຝ່າຍກອງທັບ ເຈົ້າ ຟ້າງຸ່ມ ນັ້ນ, ມີ ບາ ໂບ ຫລື ໝື່ນຊ້າຍ ແລະ ບາຈີ່ແຂ້ ໄດ້ເຄື່ອນທັບເຂົ້າມາຕັ້ງຢູ່ຖິ່ນຈຳປີ. ສ່ວນເຈົ້າ ຟ້າງຸ່ມ ເອງນັ້ນ ໄດ້ພາກອງທັບເຂົ້າມາຕັ້ງຢູ່ທົ່ງນາເໜືອ. ການສູ້ຮົບກັນ ລະຫວ່າງກອງກຳລັງວຽງຈັນ ແລະ ວຽງ ຄຳ ກັບກຳລັງຂອງເຈົ້າ ຟ້າງຸ່ມ ໃນຄາວນັ້ນ ໄດ້ດຳເນີນໄປຢ່າງດຸເດືອດທີ່ສຸດ. ບາໂບ ແລະ ບາ ຈີ່ແຂ້ ເປັນແມ່ທັບໃຫຍ່ຂອງຝ່າຍ ເຈົ້າ ຟ້າງຸ່ມ ທີ່ຕັ້ງຢູ່ຖິ່ນ ຈຳປີ ນັ້ນໄດ້ເຂົ້າສູ້ຮົບ ຊົນຊ້າງ ກັບ ທ້າວ ຊຽງມຸ່ງ ແລະ ສຸດທ້າຍ ທ້າວ ຊຽງມຸງ ກໍຖືກຂ້າຕາຍຄາຄໍຊ້າງ. ສ່ວນທ້າວ ເພົາ ເຫັນວ່າຈະ ສູ້ບໍ່ໄຫວ ຈຶ່ງໄດ້ຖອຍທັບກັບຄືນ ເມືອງ ວຽງຄຳ (ຫລື ເມືອງ ໄຜ່ໜາມ) ຈາກນັ້ນ ກອງທະຫານ ຂອງເຈົ້າ ຟ້າງຸ່ມ ກໍເຂົ້າຢຶດເອົາ ເມືອງ ວຽງຈັນ ໄດ້ຢ່າງສົມບູນ (ບ່ອນສະໜາມຮົບທີ່ແທ້ຈິງນັ້ນ ແມ່ນບໍລິເວນທົ່ງ ປາກທ້າງ ມາຫາໜອງດ້ວງ).



ຮູບແຕ້ມ ກອງທັບຂອງ ເຈົ້າ ຟ້າງຸ່ມ ກຽມຕີເອົາເມືອງ ວຽງຄຳ (ເມືອງ ໄຜ່ໜາມ) ປີ 1353

ເມື່ອກອງທັບຂອງ ເຈົ້າ ຟ້າງຸ່ມ ເຂົ້າຢຶດເອົາເມືອງວຽງຈັນ ໄດ້ແລ້ວກໍແຕ່ງໃຫ້ບາກິມ, ບາ ສຽມ ແລະ ບາຈີ່ແຂ້ ຍົກທັບໄລ່ຕິດຕາມ ທ້າວ ເພົາ ໄປຮອດ ເມືອງ ວຽງຄຳ, ແມ່ທັບທັງສາມໄດ້ ເຂົ້າໂຈມຕີ ເມືອງ ວຽງຄຳ ແຕ່ບໍ່ສາມາດເຂົ້າຢຶດເອົາຕົວເມືອງນັ້ນໄດ້, ຍ້ອນວ່າກຳແພງອ້ອມ ຕົວເມືອງ ວຽງຄຳ ນັ້ນ ແມ່ນແຕ່ກໍໄຜ່ໜາມ ອ້ອມຮອບຢ່າງໜາແໜ້ນທີ່ສຸດ. ເຖິງວ່າແມ່ທັບທັງ ສາມຂອງ ເຈົ້າ ຟ້າງຸ່ມ ຈະປິດລ້ອມເມືອງໄວ້ແລ້ວກໍຕາມ ແຕ່ທ້າວ ເພົາ ກໍບໍ່ອອກມາສູ້ຮົບ. ດັ່ງ ນັ້ນ ແມ່ທັບທັງສາມ ຈຶ່ງໄດ້ແຕ່ງຕັ້ງທະຫານມາລາຍງານຕໍ່ເຈົ້າ ຟ້າງຸ່ມ ຕາມສະພາບຄວາມເປັນ ຈິງຢ່າງຄົບຖ້ວນ. ເຈົ້າ ຟ້າງຸ່ມ ຈຶ່ງວາງກົນອຸບາຍອອກມາດ້ວຍຄວາມເຊື່ອໝັ້ນ ວ່າ: " ບໍ່ຢາກສັ່ງ, ເມື່ອໜ້າຫາກຈະຮູ້ຢ່າຊະແລ ". ຈາກນັ້ນ ເຈົ້າ ຟ້າງຸ່ມ ຈຶ່ງສັ່ງໃຫ້ກອງຄັງຫລວງ ເບີກເອົາເງິນ ແລະ ຄຳມາ ຕີເປັນກຽງໜ້າ ຫລື ລູກສອນ ເປັນຈຳນວນຫລວງຫລາຍ ແລ້ວບອກໃຫ້ແມ່ທັບທ້າ ສາມ ຍົງສຸມໃສ່ກໍໄຜ່ກຳແພງ ເມືອງ ວຽງຄຳ ໃຫ້ທົ່ວ ເຖິງທັງສາມວັນສາມຄືນ ເຮັດຄືວ່າຈະບຸກຕີ ເອົາຕົວ ເມືອງ ວຽງຄຳ ຢ່າງໃຫຍ່ຫລວງແລ້ວ ແມ່ນໃຫ້ເລີກທັບກັບຄືນມາເມືອງວຽງຈັນ, ທັງນີ້ກໍ ເພື່ອສ້າງຄວາມສົນໃຈໃຫ້ແກ່ປະຊາຊົນ ເມືອງ ວຽງຄຳ ຫັນຄວາມສົນໃຈໄປທາງອື່ນ.

ຝ່າຍປະຊາຊົນ ເມືອງ ວຽງຄຳ, ເມື່ອເຫັນກອງທັບຂອງ ເຈົ້າ ຟ້າງຸ່ມ ຖອຍໜີ ແລະ ຮູ້ວ່າ ຂ້າມຝັ່ງຂອງ ໄປທາງທິດຕາເວັນຕົກ ແລ້ວຈຶ່ງໄດ້ພາກັນອອກໄປທຳມາຫາກິນ ເປັນປົກກະຕິ, ພວກເຂົາເຈົ້າໄດ້ພົບເຫັນກຽງເງິນ, ກຽງຄຳ ຕົກຄ້າງຢູ່ໃນກໍໄຜ່ຢ່າງຫລວງຫລາຍ ເກີດມີຄວາມດີ ໃຈ ຈຶ່ງພາກັນຖາກຖາງຈູດເຜົາກໍໄຜ່ ຢ່າງເປັນຂະບວນເພື່ອຂອກເອົາກຽງໜ້າເງິນ, ກຽງໜ້າຄຳ, ເປັນເຫດໃຫ້ກຳແພງກໍໄຜ່ໜາມຂອງ ເມືອງ ວຽງຄຳ ຂາດເປັນບັ້ນເປັນຕອນໃນຫລາຍບ່ອນ.

ເມື່ອເຈົ້າ ຟ້າງຸ່ມ ໄດ້ຊາບເຫດການຂອງ ເມືອງ ວຽງຄຳ ເປັນຄືດັ່ງກ່າວມານັ້ນ ກໍໄດ້ນຳກຳ ລັງເຂົ້າສູ້ກັບ ພະຍາ ເພົາ ທີ່ອອກຕໍ່ສູ້ເຕັມຄວາມສາມາດ ແຕ່ສູ້ກອງທັບ ເຈົ້າ ຟ້າງຸ່ມ ບໍ່ໄດ້, ພະ ຍາ ເພົາ ໄດ້ຖືກຈັບ. ແຕ່ເພື່ອສະແດງເຖິງສີມືອັນເກັ່ງກ້າຂອງວິລະກະສັດ, ເຈົ້າຟ້າງຸ່ມ ຈຶ່ງໄດ້ອະ ນຸຍາດໃຫ້ ພະຍາ ເພົາ ເຂົ້າຊົນຊ້າງຕໍ່ຕໍ່ກັບເຈົ້າຟ້າງຸ່ມ, ເຖິງທີ່ສຸດກໍບໍ່ມີໃຜເອົາຊະນະໃຜ ໄດ້ ເຈົ້າ ຟ້າງຸ່ມ ຈຶ່ງຕົກລົງແຕ່ງຕັ້ງໃຫ້ ພະຍາ ເພົາ ປົກຄອງ ເມືອງ ວຽງຄຳ ດັ່ງເກົ່າ. ແຕ່ພະຍາ ເພົາ ບໍ່ຍອມຮັບຕຳແໜ່ງນັ້ນ, ຍ້ອນແນວນັ້ນ, ເຈົ້າ ຟ້າງຸ່ມ ຈຶ່ງແຕ່ງຕັ້ງຍາດພີ່ນ້ອງຂອງ ພະຍາ ເພົາ ຂຶ້ນປົກຄອງເມືອງ ວຽງຄຳ ແທນ.

ເມື່ອກອງທັບຂອງເຈົ້າຟ້າງຸ່ມ ຕີເອົາເມືອງວຽງຈັນ ແລະ ວຽງຄຳ ໄດ້ຕາມຈຸດປະສົງແລ້ວ, ພະອົງກໍໄດ້ແຕ່ງຕັ້ງໃຫ້ບາຄຸ້ມເປັນ " ໝື່ນຈັນ " ປົກຄອງເຂດແຄວ້ນວຽງຈັນ, ແຕ່ງຕັ້ງໃຫ້ບາສຽມ ເປັນ " ໝື່ນກະບອງ " ປົກຄອງບັນດາຫົວເມືອງຝ່າຍໃຕ້ ຄືຕັ້ງແຕ່ ເມືອງ ຜານ້ຳຮຸ່ງ ລົງໄປຮອດ ເຂດຫລີ່ຜີພຸ້ນ (ປົກຄອງເຂດແຄວ້ນສີໂຄດຕະບອງ). ໃນໄລຍະດຽວກັນນັ້ນ, ເຈົ້າ ຟ້າງຸ່ມໄດ້ສັ່ງ

ໃຫ້ພະຍາ ເມືອງ ຊວາ ເອົາຄອບຄົວພວກ ເຜົ່າຂອມ (ກຶມມຸ) ໄປຕັ້ງຖິ່ນຖານຢູ່ແຕ່ລະບ່ອນ ຄື: 10.000 ຄອບຄົວ ໄປຕັ້ງຫຼັກຖານຢູ່ ກະແດຟ້າແຕບ ແຄມເມືອງວຽງຈັນ; ເອົາ 10.000 ຄອບຄົວ ໄປຕັ້ງຫລັກຖານຢູ່ໜອງຫານນ້ອຍ, ໜອງຫານຫລວງ ແລະ ອີກຈຳນວນໜຶ່ງ ໄປຕັ້ງຫລັກຖານຢູ່ ພູຫວານເຖົ້າ (ໃນແຂວງ ກາລະສິນ ປະຈຸບັນ), ສານປາວ, ເມືອງ ຊຽງຂ້າຍ.

ພາຍຫລັງ ຈັດລະບຽບການບ້ານເມືອງຢູ່ວຽງຈັນ ແລະ ວຽງຄຳ ແລ້ວ, ເຈົ້າ ຟ້າງຸ່ມ ກໍໄດ້ໄປຕີເອົາຫົວເມືອງຕ່າງໆ ທາງທິດຕາເວັນຕົກສ່ຽງໃຕ້, ໃນນັ້ນມີແຄວ້ນຮ້ອຍເອັດ ແລະ ໂຄລາດ. ເມື່ອໄດ້ທ້ອນໂຮມເອົາບັນດາຫົວເມືອງນ້ອຍໃຫຍ່ທັ້ງຫລາຍ ເຂົ້າໃນອານາຈັກລາວລ້ານຊ້າງ ເອກະພາບເປັນທີ່ຮຽບຮ້ອຍແລ້ວ ພະອົງໄດ້ນຳກຳລັງກັບຄືນມາພັກເຊົາເອົາແຮງ ຢູ່ເມືອງວຽງຈັນ. ໃນເວລານັ້ນ, ພະອົງຄິດວ່າ ເມືອງວຽງຈັນນີ້ ເປັນເມືອງທີ່ກວ້າງໃຫຍ່, ທັງອຸດົມສົມບູນ ແລະ ທັງຕັ້ງຢູ່ເຄິ່ງກາງ ຂອງອານາຈັກລາວລ້ານຊ້າງ ອີກດ້ວຍ. ຊຶ່ງເວລານັ້ນ, ການເຕົ້າໂຮມຫົວເມືອງລາວຕ່າງໆ ເຂົ້າຢູ່ໃນວົງຄະນາຍາດອານາຈັກລາວລ້ານຊ້າງ ກໍຖືວ່າ ເປັນເທື່ອສຸດທ້າຍແລ້ວ, ຈຶ່ງສົມຄວນ ຕ້ອງຈັດພິທີສະຫລອງໄຊໃຫຍ່ຂຶ້ນທີ່ ເມືອງວຽງຈັນ; ນີ້ແມ່ນເພື່ອຢັ້ງຢືນເຖິງໄຊຊະນະອັນຍິ່ງໃຫຍ່ ໃນການທ້ອນໂຮມລາວ ເປັນເອກະພາບໄດ້ສຳເລັດ. ອີກດ້ານໜຶ່ງ ກໍເປັນການເສີມພະບຸນ ຂອງຕົນໃຫ້ເປັນທີ່ເກງຂາມ ແກ່ບັນດາສັກດິນາທ້ອງຖິ່ນ ໃນອານາຈັກລາວລ້ານຊ້າງ ແລະ ບັນດາອານາຈັກອ້ອມຂ້າງ. ໃນພິທີສະຫລອງໄຊໃຫຍ່ ເມື່ອປີ 1357 ທີ່ວຽງຈັນນັ້ນ, ພະອົງໄດ້ທຳພິທີ ທີ່ສຳຄັນດັ່ງນີ້:

- ການເລື່ອນຍົດ ແລະ ແຕ່ງຕັ້ງບຸກຄົນທີ່ມີຄຸນງາມຄວາມດີ ໃຫ້ໄປປົກຄອງເມືອງຕ່າງໆ.
- ແບ່ງເຂດການປົກຄອງອານາຈັກລາວລ້ານຊ້າງເອກະພາບ.
- ປະຊາຊົນເຮັດພິທີຫົດສົງໃຫ້ ເຈົ້າ ຟ້າງຸ່ມ.
- ເຈົ້າ ຟ້າງຸ່ມ ໃຫ້ຄຳໂອວາດ ສັ່ງສອນແກ່ແມ່ທັບ, ນາຍກອງ ແລະ ປະຊາຊົນ ທົ່ວໄປ.

ກ່ຽວກັບການຈັດລະບຽບ ການປົກຄອງ ຫລື ລະບົບບໍລິຫານ ອານາຈັກລາວລ້ານຊ້າງ ໃນສະໄໝ ເຈົ້າ ຟ້າງຸ່ມ ໂຮມເອົາບັນດາເມືອງລາວບູຮານ ເຂົ້າເປັນອານາຈັກລາວລ້ານຊ້າງ ເອກະພາບ ໃນປີ 1357 ນັ້ນ ປະກົດວ່າ ເຈົ້າ ຟ້າງຸ່ມ ຍັງຮັກສາລະບຽບການປົກຄອງ ຕາມແບບແຜນທີ່ເຄີຍມີມາກ່ອນ " ແບບເມືອງລູກຫລວງ " ເຊັ່ນ: ລະດັບຂັ້ນເມືອງເຂື່ອນ ມີ 6 ເມືອງ; ຂັ້ນເມືອງຂອບ ມີ 5 ເມືອງ ແລະ ຂັ້ນເມືອງດ່ານ ມີ 89 ເມືອງ. ຢູ່ໃນນີ້ມີເຂດເມືອງຫລວງ ຫລື ວ່ານະຄອນຫລວງ ອັນເປັນສູນກາງການປົກຄອງ ຂອງອານາຈັກລາວລ້ານຊ້າງ. ຢູ່ໃນນັ້ນ, ເຂື່ອນເມືອງໄດ້ມີເມືອງ ວຽງຈັນ ຊຶ່ງແມ່ນໝື່ນຈັນ ຫລື ບາຄຸ້ມ ເປັນຜູ້ປົກຄອງ, ເມືອງ ວຽງຄຳ ຊຶ່ງແມ່ນພະຍາເພົ້າ (ຄົນໃໝ່) ເປັນຜູ້ປົກຄອງ.

ໃນເວລາດຽວກັນນັ້ນ, ບັນດາເຈົ້າພະຍາ, ເສນາອາມາດ ພ້ອມດ້ວຍເຖົ້າແກ່ ປະຊາຊົນ ໄດ້ມາເຕົ້າໂຮມຢູ່ເມືອງວຽງຈັນ ຈັດຕັ້ງພິທີໄຊຍະພິເສກຫິດສິງ ເຈົ້າ ຟ້າງຸ່ມ ຂຶ້ນເປັນເຈົ້າຊີວິດທີ່ຍິ່ງໃຫຍ່ກວ່າໝູ່ໃນບັນດາເຈົ້າຊີວິດທັງຫລາຍ ຢູ່ອານາຈັກລາວລ້ານຊ້າງຜ່ານມາ.



ຮູບແຕ້ມ ເຈົ້າ ຟ້າງຸ່ມ ກ່າວຄຳໂອວາດຕໍ່ ກອງທັບ ແລະ ຊາວວຽງຈັນ ໃນງານສະຫລອງໄຊ ປີ 1357

ພິທີສະຫລອງໄຊໃຫຍ່ນີ້ ໄດ້ໄຂຂຶ້ນ ໃນລະຫວ່າງທ້າຍ ປີ 1357 (ອາດຢູ່ໃນ ເດືອນ ຈຽງ ຂອງລາວ ກຳນົດ 7 ມື້ 7 ຄືນ, ຊຶ່ງເປັນການສະຫລອງໄຊທີ່ຍິ່ງໃຫຍ່ທີ່ສຸດ, ມີກອງທັບ ແລະ ປະຊາຊົນ ໄດ້ມາເຕົ້າໂຮມກັນຢູ່ເມືອງວຽງຈັນ ເພື່ອກະກຽມສະຫລອງໄຊຍິ່ງໃຫຍ່ນັ້ນ. ພິທີນີ້, ໄດ້ຈັດຂຶ້ນຢູ່ທີ່ບໍເວນປາກນ້ຳ ປ່າສັກ ເບື້ອງເໜືອ. ດັ່ງນັ້ນ ໃນເມື່ອໄດ້ເລີກງານຍາມດີແລ້ວ ເຈົ້າພະຍາ, ເສນາອາມາດ ແລະ ເຖົ້າແກ່ປະຊາຊົນທັງມວນກໍອັນເຊີນເຈົ້າຟ້າງຸ່ມ ເຂົ້າສູ່ພິທີຫິດສິງອວຍໄຊໃຫ້ພອນແກ່ພະອົງຕາມຮີດຄອງປະເພນີ ທີ່ມີມາແຕ່ບູຮານນະການ. ເມື່ອສິ້ນພິທີຫິດສິງແລ້ວ ເຈົ້າຟ້າງຸ່ມ ໄດ້ກ່າວໂອວາດຕັກເຕືອນ, ສັ່ງສອນຕໍ່ເຈົ້າພະຍາເສນາອາມາດ ຕະຫລອດຮອດເຖົ້າ

ແກ່ປະຊາຊົນທັງມວນ, ດັ່ງເນື້ອໃນຄຳໂອວາດທີ່ມີລັກສະນະຄຳສັ່ງ, ຄຳຕັກເຕືອນໃຫ້ມີຄວາມສະຫງົບ, ຄວາມຍຸຕິທຳ, ປະຕິບັດລະບຽບກົດໝາຍ ຢ່າງເຄັ່ງຄັດ.

ເມື່ອເຈົ້າ ຟ້າງຸ່ມ ໄດ້ຈັດລະບຽບການປົກຄອງ ອານາຈັກລາວລ້ານຊ້າງ ແລະ ສະຫລອງໄຊໃຫຍ່ຢູ່ ເມືອງ ວຽງຈັນ ໄດ້ສຳເລັດລົງຢ່າງຮຽບຮ້ອຍແລ້ວ ບັນດາເຈົ້າພະຍາ ພ້ອມເສນາອາມາດ ແລະ ປະຊາຊົນ ຫົວເມືອງຕ່າງໆ ກໍພາກັນກັບເມືອບ້ານໃຜເມືອງລາວຢ່າງຊື່ນຊົມ. ສ່ວນເຈົ້າ ຟ້າງຸ່ມ ພ້ອມທັງນາຍກອງຈຳນວນໜຶ່ງ ໄດ້ເດີນທາງບົກຂຶ້ນເມືອຮອດ ເມືອງ ຊຽງທອງ ໃນເດືອນ ສີ່ (ເດືອນລາວ), ຂຶ້ນສາມຄ่ำ, ວັນອັງຄານ, ປີ 1358. ເມື່ອຮອດ ເມືອງ ຊຽງທອງ ແລ້ວ ເຈົ້າພະຍາ ພ້ອມເສນາອາມາດໄພ່ຟ້າ ປະຊາກອນ ກໍໄດ້ພ້ອມພຽງກັນ ຈັດພິທີບາສີສູ່ຂວັນ ໃຫ້ແກ່ເຈົ້າຟ້າງຸ່ມ ແລະ ແມ່ທັບນາຍກອງ ຂຶ້ນຢ່າງສົມກຽດ.

• ເມືອງວຽງຈັນ ໃນລັດຊະການ ພະຍາ ສາມແສນໄທໄຕພູວະນາດ (ປີ1374 - 1417).

ໃນປີ 1373 ພວກເສນາອາມາດລາຊະມຸນຕີທັງຫລາຍ ຈຶ່ງພ້ອມກັນອະພິເສກ ທ້າວ ອຸ່ນເຮືອນ ຂຶ້ນສະເຫວີຍລາຊະສົມບັດໃນ ນະຄອນຊຽງທອງ ເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ ແທນພະບິດາ ມີນາມມະຍົດວ່າ: ພະຍາ ສາມແສນໄທ ໄຕພູວະນາດ.

ຕໍ່ມາເມື່ອພະລາຊະໂອລົດທັງຫລາຍໄດ້ໃຫຍ່ສູງມາແລ້ວພະອົງກໍໄດ້ແຕ່ງຕັ້ງ ໃຫ້ໄປຄອງເມືອງຕ່າງໆ ຄື:

+ ໃຫ້ທ້າວ ກ້ອນຄຳ ໄປຄອງເມືອງ ຊຽງສາ.
+ ໃຫ້ທ້າວ ວັງບູລີ ໄປຄອງເມືອງ ວຽງຈັນ ມີນາມວ່າ ພະຍາ ຂວາປ่າສັກ ໃນປີ 1417.
+ ໃຫ້ທ້າວ ຄຳເຕັມຊາ ໄປຄອງເມືອງ ປາກຫ້ວຍຫລວງ.
+ ໃຫ້ທ້າວ ລີໄຊ ໄປຄອງເມືອງ ກະບອງ.
+ ສ່ວນທ້າວ ລ້ານຄຳແດງ ແຕ່ງຕັ້ງໃຫ້ເປັນແສນເມືອງ.

ເມື່ອພະຍາ ສາມແສນໄທ ໄຕພູວະນາດ ສະເຫວີຍລາຊະສົມບັດມາໄດ້ 43 ປີ ກໍສະເດັດສຸລະຄົດໃນ 1417. ໃນຍຸກສະໄໝນີ້, ອານາຈັກລາວລ້ານຊ້າງໄດ້ມີຄວາມຢູ່ເຢັນເປັນສຸກ, ໂດຍສະເພາະເມືອງວຽງຈັນ ພາຍໃຕ້ການປົກຄອງຂອງ ທ້າວ ວັງບູລີ ຫລື ພະຍາ ຂົວປ่າສັກ ໄດ້ຮຸ່ງເຮືອງສີວິໄລ ຈົນມາເຖິງ ລັດຊະການ ພະຍາ ລ້ານຄຳແດງ ໃນປີ 1428.

• ເມືອງ ວຽງຈັນ ໃນລັດຊະການ ເຈົ້າ ໄຊຍະຈັກກະພັດ ແຜ່ນແຜ້ວ.

ເມື່ອພະຍາລ້ານຄຳແດງ ໄດ້ສະຫວັນນະຄົດແລ້ວ ບ້ານເມືອງ ມີຄວາມວຸ້ນວາຍມາເຖິງປີ 1456 ພວກເສນາອາມາດ ຈຶ່ງໄປອັນເຊີນເອົາ ທ້າວ ວັງບູລີ ເຈົ້ານະຄອນວຽງຈັນ ຊຶ່ງມີນາມໃນເວລານັ້ນວ່າ ພະຍາ ຂວາป่าสัก ຂຶ້ນສະເຫວີຍລາຊະສົມບັດແທນ. ພາຍຫລັງທີ່ໄດ້ຂຶ້ນເມືອເປັນ

ເຈົ້າແຜ່ນດິນ ນະຄອນຊຽງທອງ ແລ້ວ, ທ້າວ ວັງບູລີ ມີນາມມະຍິດວ່າ ເຈົ້າ ໄຊຍະຈັກກະພັດ ແຜ່ນແຜ້ວ ພະອົງໄດ້ມອບການປົກຄອງ ເມືອງ ວຽງຈັນ ໃຫ້ເຈົ້າຊາຍ ມຸ່ຍ ຊຶ່ງເປັນລູກຊາຍຂອງ ພະຍາ ປາກທ້ວຍຫລວງ ແລະ ມີນາມວ່າ ເຈົ້າ ຕ່ອນຄຳ. ເວລານັ້ນເສນາໃຫຍ່ຝ່າຍວຽງຈັນຫລົງ ເຫັນວ່າເຫດການທາງ ນະຄອນຊຽງທອງ ຄົງຈະບໍ່ສະຫງົບຈົ່ງຍົວະເຍົ້າ ເຈົ້າຊາຍ ມຸ່ຍ ແຍກວຽງ ຈັນ ອອກເປັນເອກະລາດໜຶ່ງຕ່າງຫາກ ກຳນົດເອົາແຕ່ຕາດນ້ຳລີງໄປ (ອາດຈະແມ່ນແກ້ງຈັນ). ເຈົ້າ ໄຊຍະຈັກກະພັດ ໄດ້ຊາບຂ່າວນີ້ ຈຶ່ງແຕ່ງພວກມະຫາເລັກ ປອມຕົວລົງມາຈັບເອົາ ເຈົ້າ ຊາຍ ມຸ່ຍ ໄປປະຫານຊີວິດທີ່ດອນຈັນ ແລ້ວຈຶ່ງແຕ່ງຕັ້ງຫລານຂອງພະອົງມີນາມວ່າ ພະຍາ ຈັນ ທາງອກ (ພະເກສາທາງອກ ມາແຕ່ນ້ອຍ) ໃຫ້ເປັນເຈົ້າຄອງ ເມືອງວຽງຈັນ ໃນ ປີ 1479.

ເມື່ອເຈົ້າ ໄຊຍະຈັກກະພັດແຜ່ນແຜ້ວ ໄດ້ສິ້ນພະຊົນໄປແລ້ວ ໃນປີ 1479, ເຈົ້າ ສຸວັນນະ ບັນລັງ ກໍໄດ້ຂຶ້ນສະເຫວີຍລາຊະສົມບັດແທນພະບິດາໃນປີນັ້ນເອງ. ພະອົງສະເຫວີຍລາຊະສົມ ບັດໄດ້ 7 ປີ ກໍສະເດັດສຸລະຄົດ ເສນາອາມາດທັງຫລາຍ ຈຶ່ງພ້ອມກັນອະພິເສກເອົາ ເຈົ້າ ຊົມພູ ຂຶ້ນເປັນເຈົ້າແຜ່ນດິນ, ເວລານັ້ນມີ ອາຍຸໄດ້ 9 ປີ .

ມາເຖິງ ປີ 1500, ເມື່ອເຈົ້າ ຊົມພູ ສະເດັດສຸລະຄົດໄປແລ້ວ, ເສນາອາມາດ ຈຶ່ງພ້ອມກັນ ອະພິເສກ ເຈົ້າ ວິຊຸນນະລາດ ຂຶ້ນເປັນເຈົ້າແຜ່ນດິນ ມີນາມວ່າ: ພະວິຊຸນນະລາຊາ ໄຕພູວານາ ຖາ ທິປັດສີສັດຕະນາຄະນະຫຸດ, ພະອົງຂຶ້ນສະເຫວີຍລາດ ໄດ້ 20 ປີ ກໍສະເດັດສຸລະຄົດ.

• ເມືອງວຽງຈັນ ໃນລັດຊະການຂອງ ເຈົ້າ ໂພທິສາລາດ ປີ 1520 - 1550.

ເມື່ອເຈົ້າ ວິຊຸນນະລາດ ສິ້ນພະຊົນໄປແລ້ວ, ມາໃນປີ 1520, ເສນາອາມາດຈຶ່ງໄດ້ອັນ ເຊີນ ເຈົ້າ ໂພທິສາລາດ ຂຶ້ນເປັນເຈົ້າແຜ່ນດິນ ອານາຈັກລາວລ້ານຊ້າງທີ່ນະຄອນຊຽງທອງ, ພະ ອົງໄດ້ສະເດັດມາປະທັບຢູ່ເມືອງວຽງຈັນ, ເວລານັ້ນ ທາງນະຄອນສີອະຍຸທະຍາ (ໄທ)ໂດຍແມ່ນ ເຈົ້າ ອາທິດຕະຍະລາດ ຂຶ້ນເປັນເຈົ້າແຜ່ນດິນ ແຕ່ເຈົ້າ ໄຊຍະລາຊາ ພັດບໍ່ຖືກຕ້ອງຄ່ອງກັນກັບ ເຈົ້າແຜ່ນດິນໄທ ຈຶ່ງໜີມາເພິ່ງບາລະມີ ເຈົ້າ ໂພທິສາລາດ ທີ່ນະຄອນວຽງຈັນ. ຍ້ອນເຫດນັ້ນ, ເຈົ້າແຜ່ນດິນອະຍຸທະຍາ ຈຶ່ງຍົກກອງທັບຂຶ້ນມາຕີເມືອງວຽງຈັນ. ກອງທັບອະຍຸທະຍາຕີ ວຽງຄຸກ ໄດ້ແລ້ວ ກໍຂ້າມນ້ຳຂອງມາຕັ້ງຢູ່ທົ່ງສາລາຄຳ. ເຈົ້າ ໂພທິສະລາດ ໄດ້ແຕ່ງໃຫ້ ພະຍາ ແສນຫຼວງ ລ້ານຊ້າງ (ແສນສຸລິນທະລີໄຊ) ເຈົ້າເມືອງນະຄອນວຽງຈັນ ຍົກທັບອອກຕີກອງທັບໄທແຕກໄປ ໃນເວລາດຽວ. ກອງທັບອະຍຸທະຍາເສຍໄພ່ພົນ ແລະ ຊ້າງມ້າເປັນອັນມາກ ແລ້ວເຈົ້າ ໄຊຍະລາ ຊາ ຈຶ່ງທູນຂໍໃຫ້ ເຈົ້າ ໂພທິສະລາດ ຍົກທັບໄປຕີເອົານະຄອນສີອະຍຸທະຍາ. ເຖິງປີ 1534 ພະ ອົງ ຈຶ່ງໄດ້ເກນໄພ່ພົນຍົກທັບໄປຕີອະຍຸທະຍາ, ພະອົງໄດ້ໄປຕັ້ງທັບຢູ່ ວຽງພະງາມ (ຈັງຫວັດ ພິ ຈິດ - ໄທ) ເຖິງ 10 ວັນ ແຕ່ກອງທັບອະຍຸທະຍາ ບໍ່ອອກມາຕີ ເມືອງວຽງຈັນ ໃນສະໄໝເຈົ້າ ໂພ

ທິສາລາດ ໄດ້ມີການພັດທະນາໃໝ່ຫລາຍດ້ານ, ໄດ້ມີຄວາມຮຸ່ງເຮືອງເຫຼືອງເຫຼື້ອມ ເປັນຕົ້ນ ແມ່ນ ນະຄອນວຽງຈັນ ທາງດ້ານພຸດທະສາສະໜາ, ວັນນະຄະດີ ແລະ ການພົວພັນກັບປະເທດ ອ້ອມຂ້າງອານາຈັກລ້ານຊ້າງ ຈົນຕະຫລອດຮອດ ປີ 1550 ພະອົງຈຶ່ງໄດ້ສິ້ນພະຊົນ. ໃນເວລານັ້ນ, ແມ່ນພະຍາ ສີສັດຕະທຳມະໄຕໂລກ ເປັນເຈົ້ານະຄອນວຽງຈັນ.

ດ້ານເສດຖະກິດ - ສັງຄົມ ຂອງເມືອງ ວຽງຈັນ.

ໃນສະໄໝບູຮານນັ້ນ ໂດຍທົ່ວໄປແລ້ວແມ່ນຖືກຄອບງຳ ໂດຍເສດຖະກິດທຳມະຊາດ ຊຶ່ງສືບທອດ ແລະ ວິວັດທະນາການມາຕັ້ງແຕ່ສະໄໝບູຮານ. ອາຊີບຕົ້ນຕໍຂອງຊາວລາວໄລຍະນັ້ນແມ່ນການກະສິກຳ, ໃນນັ້ນການປູກຝັງແມ່ນເປັນປັດໄຈຕົ້ນຕໍ ແລະ ເປັນກິດຈະວັດປະຈຳວັນ; ພ້ອມດຽວກັນນັ້ນ ການລ້ຽງສັດ ກໍມີບົດບາດຄຽງຄູ່ກັນໄປກັບການປູກຝັງ ໂດຍສະເພາະແມ່ນລ້ຽງສັດໃຫຍ່ເຊັ່ນ: ງົວ, ຄວາຍ, ຊ້າງ, ມ້າ... ເພື່ອເອົາໄວ້ໃຊ້ຊ່ວຍແຮງງານຄົນ ໃນການກະສິກຳ ແລະ ການຂົນສົ່ງທາງບົກເຊັ່ນ: ຂົນສົ່ງໄມ້, ຟືນ, ເຂົ້າ ແລະ ຜົນຜະລິດອື່ນໆຈາກໄຮ່, ນາ, ສວນເຂົ້າມາບ້ານເຮືອນ, ຂົນສົ່ງສິນຄ້າໄປແລກປ່ຽນຊື້ຂາຍກັບທ້ອງຖິ່ນໃກ້ຄຽງ ຫລື ຖືກນຳໃຊ້ເຂົ້າໃນການ ປ້ອງກັນຊາດ ເຊັ່ນ: ເອີ້ນວ່າ ຊ້າງເສິກ, ມ້າເສິກ ເປັນກຳລັງສຳຄັນ.

ໃນຂະນະດຽວກັນນັ້ນ, ດ້ວຍຄວາມອຸດົມສົມບູນຂອງທຳມະຊາດ ແລະເນື່ອງຈາກຄວາມສາມາດ ໃນການຜະລິດຂອງຊາວລາວ ໃນເວລານັ້ນ ຍັງແມ່ນແບບປະຖົມປະຖານຫລ້າຫລັງ ແລະ ບໍ່ທັນມີປະສິດທິຜົນນັ້ນ, ການລ່າເນື້ອ, ຫາປາ, ການເກັບຜັກປ່າ ແລະ ເກັບກູ້ເຄື່ອງປ່າຂອງດົງອື່ນໆ ມາເປັນອາຫານນັ້ນແມ່ນກິດຈະວັດປະຈຳວັນທີ່ຂາດບໍ່ໄດ້, ໂດຍແນໃສ່ຈຸດປະສົງຕົ້ນຕໍ ແມ່ນເພື່ອຊົມໃຊ້ພາຍໃນຄອບຄົວ. ຫາກວ່າມີສ່ວນເຫລືອສ່ວນເກີນ ກໍແບ່ງປັນໃຫ້ພີ່ນ້ອງ ຫລື ວ່າກໍນຳໄປແລກປ່ຽນຄ້າຂາຍພາຍໃນຊຸມຊົນ ຫລື ຕົວເມືອງຂອງໃຜມັນເປັນສ່ວນໃຫຍ່, ສ່ວນສິນຄ້າທີ່ນຳໄປແລກປ່ຽນກັບພາຍນອກ ສ່ວນຫລາຍແມ່ນ ຜະລິດຕະພັນ ດ້ານຫັດຖະກຳ ແລະ ເຄື່ອງປ່າຂອງດົງ.

ອາດເວົ້າໄດ້ວ່າ, ເນື່ອງຈາກເງື່ອນໄຂທຳມະຊາດທີ່ອຸດົມສົມບູນ ແລະ ສະພາບຂອງສັງຄົມລາວໃນເວລານັ້ນ, ເສດຖະກິດລາວສະໄໝບູຮານ ຈຶ່ງແມ່ນເສດຖະກິດທຳມະຊາດ ເພິ່ງຕົນເອງກຸ້ມຕົນເອງ. ການຜະລິດກະສິກຳແມ່ນ ຜະລິດເພື່ອຊົມໃຊ້ ແລະ ແລກປ່ຽນກັນພາຍໃນຊຸມຊົນຕົນເອງເປັນຈຸດເລີ່ມຕົ້ນໃນສະໄໝນັ້ນ. ສ່ວນພາຍໃນຕົວເມືອງ ຫລື ກັບພາຍນອກແມ່ນຍັງມີໜ້ອຍທີ່ສຸດ.

ດ້ານການພັດທະນາສັງຄົມ ແລະ ການສຶກສາວັດທະນະທຳ, ສິນລະປະກຳສ່ວນໃຫຍ່ແມ່ນໄດ້ອີງໃສ່ພຸດທະສາສະໜາເປັນພື້ນຖານ. ສະນັ້ນ, ໃນໄລຍະທີ່ອານາຈັກລາວລ້ານຊ້າງ ມີ

ຄວາມສະຫງົບນີ້ ພຸດທະສາສະໜາ ຂະຫຍາຍຕົວໃນລະດັບສູງສົມຄວນ; ວັດວາອາຮາມ ຈຳນວນຫລວງຫລາຍ ໄດ້ຮັບການກໍ່ສ້າງຂຶ້ນທີ່ສະແດງເຖິງ ວັດທະນະທຳ ແລະ ສິລະປະກຳ ຂອງ ຊາດ ທັງເພື່ອໃຊ້ເປັນບ່ອນສຶກສາ ວັດທະນະທຳ ອີກດ້ວຍ.

ຕາມປະຫວັດສາດ ພຣະເຈດີໂລກະຈຸລາມະນີ ຫລື ພຣະທາດຫລວງວຽງຈັນ, ຊຶ່ງຮຽບຮຽງໂດຍ ມະຫາສິລາ ວິຣະວົງນັ້ນ, ປະຫວັດການສ້າງນະຄອນວຽງຈັນ ແລະ ພຣະທາດຫລວງ ວຽງຈັນ ແຕ່ດັ້ງເດີມນັ້ນແມ່ນ ເຈົ້າ ຈັນທະບູລີ ປະສິດທິສັກ (ບູລີຈັນ ອ່ອຍລ່ວຍ) ແລະ ຄົງໄດ້ ສ້າງຂຶ້ນ ແຕ່ໃນລະຫວ່າງ ປີ 236 ດັ່ງໄດ້ກ່າວມາແລ້ວ. ແຕ່ໃນສະໄໝຕໍ່ໆມາ ຊື່ສຽງຂອງນະ ຄອນວຽງຈັນ ກໍບໍ່ໄດ້ຜາກົດໃນໜັງສືເລື່ອງໃດອີກ ທັງຄວາມສຳຄັນຂອງວຽງຈັນ ຕະຫລອດຈົນ ເຫດການບ້ານເມືອງ ໃນເຂດແຄ້ວນນີ້ ກໍບໍ່ມີເລື່ອງໃດກ່າວເຖິງ ແຕ່ເຖິງຢ່າງນັ້ນກໍຕາມ ເມືອງ ວຽງຈັນ ກໍຄົງຍັງເປັນເມືອງຢູ່ຕໍ່ໆມາ, ເພາະວ່າ ໃນລະຫວ່າງ ປີ 1285 ຂຸນຣາມຄຳແຫງ ໄດ້ຂຶ້ນ ເປັນເຈົ້າແຜ່ນດິນໃນ ເມືອງ ສຸໂຂໄທ (ປະເທດໄທ) ແລ້ວພະອົງໄດ້ ເຮັດສິລາຈາລຶກບອກເຂດ ແດນ ເມືອງ ສຸໂຂໄທ ໄວ້ວ່າ " ເຂດແດນ ເມືອງ ສຸໂຂໄທ ນີ້ດ້ານຕາເວັນອອກເຖິງເມືອງວຽງຈັນ, ວຽງຄຳ ເປັນທີ່ແລ້ວ ". ດັ່ງນີ້, ຕາມຈາຣຶກນີ້ເປັນເວລາກ່ອນ ເຈົ້າ ຟ້າງຸ່ມ ລົງມາຕີວຽງຈັນ ແລະ ວຽງຄຳເຖິງ 72 ປີ. ສະນັ້ນ, ຈຶ່ງເປັນອັນຮູ້ໄດ້ວ່າ ວຽງຈັນ ແລະ ວຽງຄຳ ນີ້ເປັນເມືອງທີ່ເກົ່າແກ່, ມີ ຊື່ສຽງມາແລ້ວແຕ່ບູຮານນັບເປັນພັນກວ່າປີ, ທັງມີກະສັດເປັນຜູ້ປົກຄອງສືບຕໍ່ກັນມາ ແຕ່ຫາກບໍ່ ຜາກົດຈະແຈ້ງໄດ້ວ່າ ເປັນເມືອງເອກະລາດ ຫລື ເປັນເມືອງຫລວງຂອງປະເທດ ແຕ່ຄົງເປັນ ເມືອງນະຄອນລັດ. ລາຍຊື່ຂອງຜູ້ເປັນເຈົ້າວຽງຈັນ ຕາມການສັນນິຖານໃນ ປະຫວັດສາດ ນັບ ແຕ່ສະໄໝ ເຈົ້າ ຟ້າງຸ່ມ ຕໍ່ມາມີດັ່ງນີ້:

1. ທ້າວ ຊຽງມຸ່ງ ເປັນເຈົ້ານະຄອນວຽງຈັນ ປີ 1356.

2. ເຈົ້າ ຟ້າງຸ່ມ ຕີເມືອງ ວຽງຈັນ ໄດ້ແລ້ວໄດ້ຕັ້ງໃຫ້ ບາຄຸ້ມ ເປັນໝື່ນຈັນ ແລະ ເປັນເຈົ້າ ເມືອງວຽງຈັນ ແທນທ້າວ ຊຽງມຸ່ງ.

3. ທ້າວ ວັງບູລີ ໂອຣົດ ຂອງພຣະຍາສາມແສນໄທ ໄດ້ຮັບຕຳແໜ່ງ ເປັນພະຍາເມືອງ ຂວາຄອງເມືອງ ວຽງຈັນ ໃນລະຫວ່າງ ປີ 1417 ທ່ານຜູ້ນີ້ ໄດ້ສ້າງວັດສີຫອມ ກວມອັດຖິ ນາງ ມະຫາໄກ ຜູ້ເປັນນ້ອງສາວ(ທ້າວວັງບູຣີ ໄດ້ນາມມະຍົດເປັນເຈົ້າໄຊ ຍະຈັກກະພັດແຜ່ນແຜ້ວ).

4. ເຈົ້າ ຊາຍມຸ່ຍ (ພະໂອຣົດຂອງ ພະຍາ ປາກຫ້ວຍໜອງ) ເປັນເຈົ້າເມືອງວຽງຈັນ ໃນ ໄລຍະໜຶ່ງແຕ່ ຖືກເຈົ້າ ໄຊຍະຈັກກະພັດ ກຳຈັດເສຍ.

5. ພະຍາ ຈັນທາອກ (ຫລານເຈົ້າ ໄຊຍະຈັກກະພັດ) ເປັນເຈົ້າເມືອງ ວຽງຈັນ ໃນລະ ຫວ່າງ ປີ 1479.

6. ພະຍາ ແສນສຸຣິນທະລີໄຊ (ແມ່ທັບເອກ ໄດ້ສະຖາປະນາຕົນ ເປັນເຈົ້າແຜ່ນດິນ ວຽງຈັນ ສືບຕໍ່ຈາກເຈົ້າໄຊເຊດຖາທິລາດ) ຫຼັງຈາກພະອົງເຖິງ ສະຫວັນນະຄົດ.

7. ພະຍາ ສີທັດທຳມະໄຕໂລກ ປີ 1550 ໄດ້ສ້າງວັດ ຈັນທະບູຣີ ແລະ ວັດ ເພຍວັດ. ກ່ອນສະໄໝ ເຈົ້າໄຊເຊດຖາທິລາດ ມາສ້າງຕັ້ງນະຄອນວຽງຈັນ ເປັນລາຊະທານີ ມີ 6 ພະອົງ ທ່ານີ້ທີ່ປະກົດໃນໃບລານພົງສາວະດານ ຫຼື ຕຳນານວຽງຈັນ.

II. ເມືອງວຽງຈັນ ຖືກສະຖາປະນາເປັນ ນະຄອນຫລວງ ແຫ່ງຣາຊະອານາຈັກ ລາວລ້ານຊ້າງ.

1. ເງື່ອນໄຂຍຸດທະສາດ ສຳຄັນທີ່ພາໃຫ້ເຈົ້າໄຊເຊດຖາທິລາດ ຕົກລົງຕັ້ງວຽງຈັນເປັນ ນະຄອນຫລວງ.

ເມື່ອເຈົ້າ ໂພທິສະລາດ ໄດ້ສິ້ນພະຊົນ (ເສຍຊີວິດ) ແລ້ວ, ເສນາອາມາດ ທັງຫລາຍ ຈຶ່ງ ໄດ້ໄປອັນເຊີນເອົາເຈົ້າ ໄຊເຊດຖາທິລາດ ຜູ້ເປັນໂອລົດອົງໃຫຍ່ຂອງເຈົ້າ ໂພທິສະລາດຂຶ້ນເປັນ ເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ ທີ່ນະຄອນຊຽງທອງ ໃນປີ 1550. ເຈົ້າ ໄຊເຊດຖາທິລາດ ຊຶ່ງມີຊື່ເດີມວ່າ ເຈົ້າ ເຊດຖາວັງໂສ ເປັນໂອຣົດອົງໃຫຍ່ (ລູກກົກ) ຂອງເຈົ້າ ໂພທິສາຣາດ ແລະ ພະມານດາ ຊື່ພະນາງ ຍອດຄຳທິບ ທີ່ເປັນພະຣາຊະທິດາຂອງເຈົ້າແຜ່ນດິນຊຽງໃໝ່.

ສົມເດັດເຈົ້າ ໄຊເຊດຖາທິລາດ ປະສູດໃນປີມະເມຍ, ເດືອນອ້າຍ, ແຮມ 9 ຄ่ຳ, ເວລາ ທ່ຽງ, ປີ 1534.



ຮູບປັ້ນ ເຈົ້າໄຊເຊດຖາທິລາດ
ທີ່ຫາດຫລວງວຽງຈັນ (1534 - 1572)

ເມື່ອເຈົ້າ ໄຊເຊດຖາ ມີພະຊົນມາຍຸໄດ້ 14 ປີ, ພະລາຊະບິດາ (ເຈົ້າ ໂພທິສະລາດ) ໄດ້ ທ້ຽວອະພິເສກໃຫ້ໄປ ເປັນເຈົ້າຊາຍແຜ່ນດິນ ຊຽງໃໝ່ ຕາມຄຳຂໍຮ້ອງຂອງເສນາມຸນຕີເມືອງ ຊຽງ ໃໝ່ ໃນປີ 1548. ມາເຖິງປີ 1550, ພາຍຫລັງພະລາຊະບິດາ ສະເດັດສຸຣະຄົດໄປແລ້ວ, ພວກ ເສນາອາມາດຝ່າຍ ນະຄອນຊຽງທອງ ຈຶ່ງຊິງອະພິເສກ ເຈົ້າໄຊເຊດຖາທິລາດ ຂຶ້ນເປັນເຈົ້າແຜ່ນ ດິນແທນ. ພະອົງໄດ້ແຕ່ງຕັ້ງ ພະຍາ ສີສັດທຳມະໄຕໂລກ ໃຫ້ເປັນພະຍາ ມີນາມມະຍົດວ່າ ຈັນ ທະບູລີ ສີສັດທຳມະໄຕໂລກ ຂຶ້ນນັ່ງ ນະຄອນວຽງຈັນ ໂດຍມີບັນດາເມືອງ ຄື: ຊຽງຄານ, ແກ່ນ ທ້າວ, ໜອງແກ, ເມືອງ ນ້ຳຮຸ່ງ, ຊຽງສາ, ເມືອງ ຫ້ວຍຫລວງ ແລະ ວຽງຄຳ ຂຶ້ນກັບ ນະຄອນວຽງ ຈັນ ຢູ່ໃຕ້ການປົກຄອງຂອງ ພະຍາ ຈັນທະບູລີ.

ມາເຖິງ ປີ 1560, ເຈົ້າ ໄຊເຊດຖາທິລາດ ໄດ້ພິຈາລະນາເຫັນວ່າ ນະຄອນຊຽງທອງ ເປັນ ເມືອງທີ່ຄັບແຄບ, ບໍ່ກວ້າງຂວາງ ແລະ ອີກປະການໜຶ່ງ ກໍຢູ່ໃນທາງເດີນຂອງພະມ້າ ທີ່ກຳລັງ ເປັນສັດຕູຢູ່ກັບນະຄອນຊຽງທອງ, ທັງພິຈາລະນາເຫັນວ່າ, ເມືອງ ວຽງຈັນ ເປັນນະຄອນທີ່ໃຫຍ່,

ມີເຂດທົ່ງພຽງ ທຳມາຫາກິນຢ່າງກວ້າງຂວາງ, ອຸດົມສົມບູນໄປດ້ວຍເຂົ້າປາອາຫານສົມຄວນ ຈະຕັ້ງເປັນຣາຊະທານີໄດ້. ດັ່ງນັ້ນ, ພະອົງຈຶ່ງມອບເວນ ນະຄອນຊຽງທອງ ໃຫ້ພະສັງຄະເຈົ້າ ເຝົ້າຮັກສາ ພ້ອມດ້ວຍພະບາງເຈົ້າ. ສ່ວນພະອົງໄດ້ເຊີນເອົາ ພະແກ້ວມໍລະກົດ ແລະ ພະແຊກ ຄຳ ກັບພະລາຊະສົມບັດທັງມວນ ແລ້ວກໍຍົກໄພ່ພົນສ່ວນໜຶ່ງລົງມາຢູ່ນະຄອນວຽງຈັນ ແລະ ຂະ ໜານນາມ ນະຄອນນີ້ວ່າ: “ **ນະຄອນຈັນທະບູລີ ສີສັດຕະນາຄະນະຫຸດອຸດຕະມະລາຊະທານີ** ”. ສ່ວນນະຄອນຊຽງທອງ ນັ້ນເອີ້ນວ່າ: “ ນະຄອນຫລວງພະບາງ ” ນັບແຕ່ນັ້ນມາ ຍ້ອນວ່າ ພະບາງ ຍັງສະຖິດຢູ່ທີ່ນັ້ນ. ໃນປີນັ້ນເອງພະອົງກໍ່ໄດ້ສ້າງ ພະມະຫາຜາສາດລາຊະວັງຫລວງຂຶ້ນ ໃໝ່ພ້ອມທັງຫໍພະແກ້ວ, ພະແຊກຄຳ ຢ່າງພິຈິດພິດສະດານ ທັງເປັນເງື່ອນໄຂອັນຈຳເປັນພາ ວະວິໄສ ເພື່ອການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືພັດທະນາ ນະຄອນຫລວງ ວຽງຈັນ ໃຫ້ຮຸ່ງເຮືອງສີວິໄລ ແລະ ເຂັ້ມແຂງໃນເວລານັ້ນ.


2. ນະຄອນຫລວງວຽງຈັນ ຫຼື ນະຄອນຈັນທະບູລີ ສີສັດຕະນາຄະນະຫຸດ ພາຍໃຕ້ລາຊະ ການ ເຈົ້າ ໄຊເຊດຖາທິລາດ.

ເພື່ອຮັບປະກັນ ໃຫ້ແກ່ການປົກຄອງປະເທດຊາດ ແລະ ຫລີງເຫັນໄພອັນຕະລາຍຈະມາ ຂົ່ມຂູ່ຈາກສັດຕູພາຍນອກ ເປັນຕົ້ນ ແມ່ນສັກດິນາພະມ້າ, ດັ່ງນັ້ນໃນປີດຽວກັນນີ້ ຄືປີ1560 ນີ້ ເອງ ເຈົ້າ ໄຊເຊດຖາທິລາດ ກໍໄດ້ຕັດສັ່ງໄພ່ຟ້າປະຊາກອນສ້າງກຳແພງເມືອງ ແລະ ພະອົງກໍໄປ ສ້າງສາຍສຳພັນທະໄມຕີກັບ ກຸງສີອະຍຸດທະຍາ. ພ້ອມດຽວກັນນັ້ນ, ພະອົງກໍໄດ້ຮ່ວມມືກັບເຈົ້າ ແຜ່ນດິນອະຍຸທະຍາ ສ້າງພະທາດສີສອງຮັກ ຂຶ້ນທີ່ ເມືອງ ດ່ານຊ້າຍ ໃຫ້ເປັນຫລັກເຂດແດນ ແຫ່ງປະເທດທັງສອງ ຊຶ່ງຍັງປະກົດເຫັນຈົນເທົ້າທຸກວັນນີ້. ພະທາດສີສອງຮັກ ເລີ່ມສ້າງປີ 1560 ເຖິງ ປີ1563 ແຫກແຕ່ບ່ອນສ້າງທາດນັ້ນ ໄປເຖິງນ້ຳຂອງ ໄກທໍ່ກັນກັບໄປຫານ້ຳມ່ານ. ຕົກມາ ໃນປີ 1562, ເຈົ້າ ໄຊເຊດຖາທິລາດ ໄດ້ຕັດສິນໃຈຂໍເອົາ ນາງ ເທບກະສັດຕີ ແຫ່ງກຸງສີອະຍຸທະ ຍາມາເປັນອັກຄະມະເຫສີ ເຖິງວ່າຈະຫຍຸ້ງຍາກ ແຕ່ກໍສຳເລັດຕາມຈຸດປະສົງ.



ທາດສີສອງຮັກ ທີ່ແຂວງ ເລີຍ (ປະເທດໄທ)

ກຳແພງເມືອງວຽງຈັນບູຮານ ມີການກໍ່ສ້າງມາ ແຕ່ປີ 1560 ພາຍຫຼັງທີ່ມີການຍ້າຍນະຄອນຫລວງ ຈາກນະຄອນຫລວງພະບາງ ມາຕັ້ງຢູ່ວຽງຈັນ ເພື່ອປ້ອງກັນການຮຸກຮານຈາກສັກດິນາຕ່າງຊາດ, ຜູ້ປົກຄອງໃນສະໄໝນັ້ນ ຈຶ່ງມີການວາງແຜນຮັບມືກັບເຫດການທີ່ຈະເກີດຂຶ້ນ ດັ່ງນັ້ນ, ກຳແພງເມືອງຈຶ່ງຖືກສ້າງ, ມີຄວາມສູງ 4 ແມັດ, ກວ້າງ 3 ແມັດ, ທັງໝົດນັ້ນ ໂດຍແມ່ນຢາດເຫື່ອແຮງງານຂອງປະຊາຊົນລາວ ໃນສະໄໝນັ້ນເປັນຜູ້ສ້າງຂຶ້ນ ກຳແພງເມືອງຊັ້ນໃນ ເລີ່ມຈາກປາກປ່າສັກ ເບື້ອງໃຕ້ໄປຕາມທາງທິດເໜືອ (ເຖິງ 5 ແຍກ ໂຮງລະຄອນ ຖະໜົນຂົວຫຼວງ, ຖະໜົນທົ່ງຂັນຄຳ ແລະ ຖະໜົນ ຊຸນບູລົມ ຄົບກັນ), ແລ້ວລ້ຽວລົງໄປທິດຕາເວັນອອກ ລົງຕາມ ຖະໜົນ ຄູວຽງ ຈົນເຖິງ ປາກຫ້ວຍຂາວ ຫລັກ 3 (ບ່ອນຖະໜົນ ທ່າເດື່ອ ກັບຖະໜົນ ຄູວຽງ ຄົບກັນ), ຍາວປະມານ 5 ກິໂລແມັດ, ເປັນກຳແພງຊັ້ນໃນ ເພື່ອປ້ອງກັນ ນະຄອນຫລວງວຽງຈັນ (ຖະໜົນ ຊຸນບູລົມ ແລະ ຖະໜົນ ຄູວຽງ ແມ່ນໄດ້ສ້າງຂຶ້ນໃສ່ຊາກສະຫລັກຫັກພັງຂອງ ກຳແພງເມືອງຊັ້ນໃນ ໃນສະຕະວັດທີ 20 ນີ້ເອງ).



ແຜນຜັງສະແດງ ກຳແພງເມືອງວຽງຈັນ ສະໄໝ ເຈົ້າ ໄຊຍະເຊດຖາ.

ກຳແພງຊັ້ນນອກ, ອີງຕາມຮູບຖ່າຍທາງອາກາດ SGI ຂອງຝຣັ່ງ1952 ແລະ ຂອງAMS, 20/1/1958 ໄດ້ໃຫ້ເຫັນຢ່າງຊັດເຈນ ຮ່ອງຮອຍຂອງກຳແພງຊັ້ນນອກ ຍາວປະມານ 14.300 ແມັດ (14,3 ກິໂລແມັດ), ຊຶ່ງເລີ່ມຈາກ ບ້ານ ຫົວຄູ ສຸດໄປຕາມແຄມຮ່ອງແຊງ ເບື້ອງໃນ ຕາມ ແຄມບຶງແຄມນາຜ່ານ ບ້ານ ໂພນຕ້ອງ (ຫຼັງໂຮງງານ ປະລາສະຕິກ) ລຽບຕາມຮ່ອງແຊງ ຫລັງ ໂພນເຄັງ ລັດໃສ່ບຶງ ທາດຫລວງ ໄປເບື້ອງໃນຖະໜົນກຳແພງເມືອງ ແລ້ວມາແຍກກັນ ຢູ່ຕໍ່ໜ້າ ວັດໂພນທັນເໜືອ ມາເຖິງທາງໂຄ້ງດອນກອຍ ເລາະຕາມແຄມບຶງໄປຮອດ ບ້ານ ໜອງໄຮແລ້ວ ຕັດລົງໃສ່ນ້ຳຂອງ ທີ່ບ້ານ ທ່ານາ ເມືອງ ທາດຊາຍຟອງ (ປະຈຸບັນນີ້) ເພື່ອເປັນການສະກັດກັ້ນ ສັດຕູ, ເປັນການກໍ່ສ້າງດ້ວຍດິນຈີ່ກ້ອນໃຫຍ່ ໂບກດ້ວຍດິນໜຽວທຳມະດາແບບກຳແພງຊັ້ນໃນ, ກຳແພງນີ້ສູງ 5 ແມັດ, ກວ້າງ 1,5. ນັກບູຮານວິທະຍາສັນນິຖານວ່າ, ການກໍ່ສ້າງກຳແພງຊັ້ນ ນອກ ແມ່ນໃນລະຫວ່າງ ສະຕະວັດທີ 17 ຫາ 19 .

ມາໃນປີ 1562 ພະອົງໄດ້ສັ່ງໃຫ້ ພະຍາ ສີສັດທຳມະໄຕໂລກ ເຈົ້ານະຄອນວຽງຈັນ ສ້າງ ວັດ ເພຍວັດ ແລະ ວັດ ຈັນທະບູລີ ຂຶ້ນ.



ດິນຈີ່ ທີ່ໃຊ້ສ້າງກຳແພງ ເມືອງວຽງຈັນສະໄໝບູຮານ

ນະຄອນຫຼວງວຽງຈັນ ຫາກໍໄດ້ສ້າງຕັ້ງເປັນນະຄອນຫລວງ ຂອງອານາຈັກລາວລ້ານຊ້າງ, ມາໃນປີ 1563 ພັດຖືກສັກດິນາ ພະມ້າ ເຂົ້າມາຮຸກຮານ. ໃນເວລານັ້ນ ເຈົ້າ ໄຊເຊດຖາທິລາດ ກຳລັງຍົກພົນໄປຕ້ອນຮັບເອົາ ພະນາງ ເທບກະສັດຕີ ຢູ່ທີ່ ເມືອງ ໜອງຫານ ແລະ ທຳການສະ ຫຼອງ ພະທາດໜອງຫານ ດ້ວຍພະອົງມອບເມືອງ ໃຫ້ແກ່ ພະມະຫາອຸປະຣາດ ຢູ່ຮັກສາ ແຕ່ຂະ ນະດຽວກັນນັ້ນ, ຝ່າຍແສນນ້ອຍ ແລະ ພະຍາ ສາມລ້ານ ທີ່ເມືອງ ຊຽງໃໝ່ ແຍກເອົາຕົນອອກ ຈາກເຈົ້າ ຫົງສາວະດີ. ສະນັ້ນ, ເຈົ້າ ຫົງສາວະດີ ຈຶ່ງສັ່ງໃຫ້ ອິນເມ ເປັນແມ່ທັບລົງມາຈັບເອົາ ແສນນ້ອຍ ກັບພະຍາ ສາມລ້ານ. ຕົວແສນນ້ອຍ ພັດໄປລີ້ຢູ່ເມືອງ ຊຽງແສນ, ສ່ວນພະຍາ ສາມ ລ້ານ ພັດມາຂໍເພິ່ງເມືອງຫຼວງປະເທດລາວລ້ານຊ້າງ, ຈຶ່ງເປັນເຫດໃຫ້ ອິນເມ ແມ່ທັບພະມ້າຍົກ ພົນໄລ່ຕາມຕີ ພະຍາ ສາມລ້ານ ເຂົ້າເຖິງວຽງຈັນ ແຕ່ພະມ້າ ໄດ້ຈັບເອົາເຈົ້ານາງ ຄຳໄຂ, ເຈົ້ານາງ ແທ່ນຄຳ, ພະຍານະຄອນ ພ້ອມກັບເຈົ້າ ມະຫາອຸປະຣາດ ໜີໄປ ເມືອງ ພະມ້າ. ສ່ວນເຈົ້າ ໄຊເຊດຖາທິລາດ ກໍໄດ້ຟ້າວຍົກທັບກັບຄືນ ນະຄອນຫລວງວຽງຈັນ ແຕ່ພະມ້າໄດ້ໜີໄປກ່ອນ ແລ້ວ. ພະອົງ ຈຶ່ງໄດ້ສັ່ງໃຫ້ ພະຍາ ຊ້າຍແຂນຫັກ ນຳຕີກອງທັບພະມ້າ ຈົນເຖິງເມືອງ ນ່ານ. ພະ ອົງຈຶ່ງແຕ່ງຕັ້ງໃຫ້ ພະຍາ ຊ້າຍແຂນຫັກ ເປັນແສນເມືອງ ແລະ ແຕ່ງຕັ້ງໃຫ້ ແສນຊ້າງທ່າວ ເປັນ ພະຍານະຄອນ.

ເມື່ອສະພາບການບ້ານເມືອງກັບເຂົ້າສູ່ປົກກະຕິ, ເຈົ້າໄຊເຊດຖາທິລາດ ກໍໄດ້ນຳພາຊາວ ນະຄອນຫຼວງວຽງຈັນ ສ້າງພະທາດຫຼວງຂຶ້ນ ໃນປີ 1566 ຢູ່ໃນເຂດສວນອຸທິຍານ ດ້ານຕາເວັນ ອອກ ແຫ່ງພະນະຄອນວຽງຈັນ ໂດຍກໍກວມເຈດີເກົ່າ, ເມື່ອສ້າງສຳເລັດແລ້ວ ຈຶ່ງຂະໜານນາມ ວ່າ: " ພະທາດເຈດີໂລກະຈຸລາມະນີ " ແລະ ໄດ້ທຶ່ງອຸທິດທີ່ດິນໄຮ່ນາ ແລະ ອະນຸຍາດໃຫ້ສ້າງ ວັດສຳຄັນອື່ນໆ ອີກຄື: ວັດປ່າລີສີສັງຫອນ, ສ້າງອຸມຶງໂລ່ມ ທາດພະອໍລະຫັນ ທີ່ວັດປ່າມະຫາ ພຸດທະວົງ (ວັດໂສກປ່າຫຼວງ ດຽວນີ້), ສ້າງວັດປ່າກັນທອງ ທີ່ໜອງຍາງຄຳ, ແລ້ວໄປສ້າງທາດ ໂລ່ມທາດຫົວເນີ່ງຢູ່ພູເຂົ້າຫຼວງ (ແມ່ນທາດ ບັງພວນ - ໜອງຄາຍ) ແລະ ສ້າງວັດຂຶ້ນທີ່ ໂພນ ໜອງກົກ (ຢູ່ໃກ້ກັບ ວັດບັງພວນ). ຈາກນັ້ນ ພະອົງຈຶ່ງລົງໄປສ້າງວັດຢູ່ ເມືອງ ມະລຸກຂະນະ ຄອນ ຄືເມືອງ ທ່າແຂກເກົ່າ ທຸກວັນນີ້, ຈຶ່ງໄດ້ກໍພະເຈດີ ກວມທາດສີໂຄດຕະບູນ ຂຶ້ນຕື່ມ. ຕໍ່ ຈາກນັ້ນ ພະອົງໄດ້ນະມັດສະການພະທາດພະນົມ ແລະ ໃຫ້ພວກຊ່າງທຳການປະຕິສັງຂອນ ສ້ອມແປງ ພະທາດພະນົມ ຄືນໃໝ່ ແລ້ວຈຶ່ງກັບຄືນ ນະຄອນຫລວງວຽງຈັນ.



ຮູບແຕ້ມຈິນຕະນາການ ເຈົ້າ ໄຊເຊດຖາທິລາດ
ນຳພາປະຊາຊົນສ້າງ ພະທາດຫລວງວຽງຈັນ



ພະທາດຫລວງ ສ້າງໃນປີ 1566 ໃນສະໄໝ ເຈົ້າ ໄຊເຊດຖາທິລາດ
ຮູບເດີມ ແຕ້ມໂດຍ ເດີລາປ໋ອກ (Delaporte) ປີ 1867.

ໃນສະໄໝຂອງ ເຈົ້າ ໄຊເຊດຖາທິລາດ, ພຸດທະສາສະໜາ ໃນປະເທດລາວ ມີຄວາມຮຸ່ງເຮືອງສົມຄວນ. ໃນນະຄອນຫຼວງວຽງຈັນ ເຕັມໄປດ້ວຍວັດວາອາຮາມ ແລະ ທາດເຈດີທີ່ປະດັບປະດາຢ່າງວິຈິດພິດສະດານ (ຕາມຈົດໝາຍເຫດຂອງນາຍ ແກມຟຣີ ຄົນເຢຍລະມັນ ຊຶ່ງໄດ້ເຂົ້າມາປະເທດໄທ ແລະ ປະເທດລາວ ໃນສະໄໝນັ້ນ ກ່າວໄວ້ວ່າ ໃນພະນະຄອນວຽງຈັນ ມີວັດຢູ່ 120 ວັດ) ນອກຈາກການສ້າງແປງພະນະຄອນ ແລະ ວັດວາອາຮາມແລ້ວ ພະອົງຍັງມີຈິດເຫຼື້ອມໃສ ນຳພາຊາວນຄອນຫຼວງວຽງຈັນ ຫຼໍ່ພະພຸດທະຮູບອົງສຳຄັນຂຶ້ນຢ່າງຫຼວງຫຼາຍ ຄື: ພະອົງຕື້, ພະສຸກ, ພະເສີມ, ພະໃສ ເປັນຕົ້ນ.

3. ນະຄອນຫລວງວຽງຈັນ ຖືກພະມ້າຄຸກຄາມ ຢ່າງໜັກ ເຖິງ 3 ຄັ້ງ.

- ຍ້ອນວ່າການຍ້າຍ ນະຄອນຫລວງ ຈາກນະຄອນຊຽງທອງ ມາຢູ່ ນະຄອນຫລວງວຽງຈັນ ແລະ ກໍຖືກພະມ້າ ຕີລາຄາວ່າຈະຮ່ວມມືກັບສະຫຍາມ ເພື່ອຕ້ານການຮຸກຮານຂອງເຂົາ, ພະມ້າ ຈຶ່ງໄດ້ຍົກກອງທັບລົງມາ ໃນປີ 1569, ຕີນະຄອນສີອາຍຸທະຍາກ່ອນ ເຈົ້າ ໄຊເຊດຖາ ຈັດກຳລັງໄປຕ້ານຢູ່ທາງ ເມືອງ ລົບບູລີ ກ່ອນ, ກອງທັບຂອງເຈົ້າ ໄຊເຊດຖາ ຈຶ່ງເອົາຊະນະກອງທັບຂອງ ເຈົ້າ ຢ້າຕອງອູ ໄດ້.

• ເຫັນໄດ້ຄືແນວນັ້ນ, ເຈົ້າ ໄຊເຊດຖາ ຈຶ່ງສັ່ງໃຫ້ກອງທັບ ພະຍານະຄອນ ບຸກຕີຂະໜາບ ເພື່ອໄລ່ສັດຕູ ໃຫ້ອອກໄກຈາກເມືອງຫຼວງໃໝ່ຂອງວັນຕັນ, ແຕ່ກອງທັບຂອງພະມ້າພັດສາມາດ ຕ້ານຄືນຢ່າງໜັກ, ຈົນເຮັດໃຫ້ກອງທະຫານຂອງ ພະຍານະຄອນ ຖືກປິດລ້ອມ. ແຕ່ກໍ່ຍັງໂຊກດີ ທີ່ກອງທັບຂອງ ພະຍາ ແສນສຸລິນທາ ເຂົ້າຊ່ວຍຢ່າງທັນການ, ຖືວ່າຝ່າຍ ເຈົ້າ ໄຊເຊດຖາ ໄດ້ ຮັບໄຊຊະນະຄັ້ງທີສອງ ຂອງການບຸກໂຈມຕີກັບພະມ້າ.

• ຄັ້ງທີ 3 ພະຍາ ແສນສຸລິນ ແມ່ທັບໃຫຍ່ຂອງ ເຈົ້າ ໄຊເຊດຖາ, ຊຶ່ງໄດ້ນຳໃຊ້ກົນລະຍຸດ ຖອຍອອກຈາກເມືອງ ປະໃຫ້ສັດຕູເຂົ້າບຸກ ແລ້ວຈຶ່ງຫຸ້ມຕີຕາມພາຍຫຼັງ, ກອງທັບພະມ້າທົ່ງຂາດ ການລຳລຽງສະບຽງອາຫານ, ທັ້ງຖືກປິດລ້ອມ ແລະໂຈມຕີຈາກພາຍນອກແບບກອງໝອນ, ຈຶ່ງ ຖືກເສຍຫາຍຢ່າງໜັກ. ເມື່ອພະມ້າເລີກທັບໄປແລ້ວ, ເຈົ້າ ໄຊເຊດຖາທິລາດ ຈຶ່ງກັບຄືນມາປົກ ຄອງ ນະຄອນຫລວງວຽງຈັນ ຄືນດັ່ງເກົ່າ ໂດຍບໍ່ມີຫຍັງເສຍຫາຍໝວງໝາຍ.

ມາເຖິງປີ 1572, ເຈົ້າ ໄຊເຊດຖາທິລາດ ຍັງໄດ້ເກນໄພ່ພົນໄປຕີ ພວກກະບົດ ເມືອງ ອີ່ງ ການ ເຂດອັດຕະປື ປະຈຸບັນ. ແຕ່ປະກົດວ່າພະອີ່ງພ້ອມດ້ວຍກອງທະຫານ ໄພ່ພົນຈຳນວນໜຶ່ງ ຖືກເສຍຫາຍຢ່າງໜັກ, ພະອີ່ງມີຄວາມອິດເມື່ອຍຕໍ່ການປົກປັກຮັກສາເຂດແຄວ້ນ ຂອງອານາ ຈັກ ຈຶ່ງເຖິງແກ່ສະຫວັນນະຄົດ ດ້ວຍພະຍາດໄຂ້ປ່າ ຊຶ່ງຊາວລາວເຮົາເຊື່ອວ່າ ພະອີ່ງຖືກຫາຍ ສາບສູນໄປດ້ວຍເຫດການອື່ນໆ.

ເປັນອັນວ່າໃນຊີວິດບັ້ນທ້າຍຂອງພະອີ່ງ, ເຈົ້າ ໄຊເຊດຖາ ໄດ້ສົ້ນພະຊົນ ດ້ວຍຄວາມພິ ລະອາດຫານຈາກການຕໍ່ສູ້ກັບສັດຕູພາຍນອກ ແລະ ພາຍໃນ; ເປັນຕົ້ນແມ່ນກັບສັກດິນາພະມ້າ ເຖິງສາມຄັ້ງ, ເຮັດໃຫ້ພະອີ່ງເຫຼືອໄວ້ແຕ່ຄຸນງາມຄວາມດີ ຕໍ່ແຜ່ນດິນຂອງພະອີ່ງ ຢ່າງສົມກຽດ.

ພາຍຫຼັງທີ່ພະອີ່ງໄດ້ສົ້ນພະຊົນໄປແລ້ວ, ພວກອາມາດທີ່ກະທາຍອຳນາດ ໄດ້ຍາດຊິ່ງກັນ ຂຶ້ນຄອງພະລາຊະບັນລັງ, ໂດຍແມ່ນແມ່ທັບ ພະຍາແສນສຸລິນທາ ເປັນຜູ້ຊະນະ ແລະ ໄດ້ແຕ່ງ ຕັ້ງຕົນເອງຂຶ້ນເປັນເຈົ້າແຜ່ນດິນ ອານາຈັກລ້ານຊ້າງຢູ່ນະຄອນຫຼວງວຽງຈັນໃນປີ 1572 ໄດ້ພຽງ ແຕ່ 2 ປີ ກໍຖືກພະມ້າກັບເຂົ້າມາ ຢຶດເອົານະຄອນຫລວງວຽງຈັນ ໄດ້ຊົ່ວໄລຍະໜຶ່ງ.

4. ນະຄອນຫຼວງວຽງຈັນ ຕົກເປັນຫົວເມືອງສ່ວຍຂອງພະມ້າ (ປີ 1574 - 1580).

ເຈົ້າ ສຸມັງຄະລະໄອຍະໂກໂພທິສັດ ຂຶ້ນປົກຄອງແຜ່ນດິນທີ່ ນະຄອນຫລວງວຽງຈັນ ໄດ້ 2 ປີ, ຄືນມາເຖິງ ປີ 1574 ເຈົ້າແຜ່ນດິນ ເມືອງ ຫົງສາວະດີ ແຫ່ງປະເທດພະມ້າ ກໍໄດ້ຍົກໄພ່ພົນ ເຂົ້າມາຕີວຽງຈັນອີກ ເປັນຄັ້ງທີ 3 ພະສຸມັງຄະນະໄອຍະໂກໂພທິສັດ ໄດ້ທຳການປ້ອງກັນນະ ຄອນຫລວງຢ່າງແຂງແຮງ. ແຕ່ເວລານັ້ນປະຊາລາສະດອນກຳລັງຕົກທຸກໄດ້ຍາກ, ຜ່ານຜ່າເສິກ ສົງຄາມມາຢ່າງຕໍ່ເນື່ອງ, ສ່ວນຫຼາຍເກີດເບື່ອໜ່າຍຕໍ່ສົງຄາມ ແລະ ສ່ວນຫຼາຍກໍບໍ່ພໍໃຈນຳເຈົ້າ

ແຜ່ນດິນເພາະບໍ່ແມ່ນເຊື້ອໝໍ່ກະສັດ. ດັ່ງນັ້ນ, ປະຊາຊົນພົນລະເມືອງ ຈຶ່ງປະໜີສິງຄາມເຮັດໃຫ້ ທະຫານພະມ້າ ເຂົ້າຢຶດເອົາ ນະຄອນຫລວງວຽງຈັນ ໄດ້ຢ່າງງ່າຍດາຍ, ທັງຈັບເອົາພະສຸມັງຄະ ລະໄອຍະໂກ ໂພທິສັດ ກັບ ເຈົ້າ ໜໍ່ເມືອງ ໄປຢູ່ປະເທດພະມ້າ ເຮັດໃຫ້ປະເທດລາວລ້ານຊ້າງ ຕົກເປັນເມືອງສ່ວຍຂອງປະເທດພະມ້າ ໃນປີ 1574.

ໃນເວລານັ້ນ ອານາຈັກລາວລ້ານຊ້າງ ບໍ່ມີເຈົ້າແຜ່ນດິນປົກຄອງ, ມາເຖິງ ປີ 1575 ເຈົ້າ ແຜ່ນດິນ ຫົງສາວະດີ ຈຶ່ງແຕ່ງໃຫ້ພະມະຫາອຸປະລາດວໍລະວັງໂສ (ນ້ອງຊາຍ ຂອງເຈົ້າ ໄຊເຊດ ຖາທິລາດ) ຊຶ່ງພະມ້າໄດ້ຈັບໄປໄວ້ຢູ່ປະເທດພະມ້າ ແຕ່ກ່ອນພຸ້ນ ຄືນມາເປັນເຈົ້າແຜ່ນດິນອາ ນາຈັກລາວລ້ານຊ້າງ ທີ່ວຽງຈັນ ມາໄດ້ 4 ປີ ຄືໃນປີ 1579, ໄດ້ມີບຸກຄົນຜູ້ໜຶ່ງທີ່ຢູ່ແຂວງ ອັດຕະ ປື ເປັນຄົນມີວິຊາອາຄົມດີ, ໄດ້ອວດອ້າງຕົນເອງວ່າເປັນເຈົ້າໄຊເຊດຖາທິລາດ ທີ່ຫາຍສາບສູນ ໄປແຕ່ຄາວກ່ອນນັ້ນ ບັດນີ້ຈະກັບຄືນປົກຄອງນະຄອນວຽງຈັນອີກ, ຄົນທັງຫລາຍກໍພາກັນຫລົງ ເຊື່ອ, ບຸກຄົນຜູ້ນັ້ນໄດ້ເກ້ຍກ່ອມຊັກຊວນເອົາພວກຂ້າສ່ວຍຊາວເມືອງ ໂສກ, ເມືອງ ຊຸງໄດ້ແລ້ວ ກໍຍົກພົນຂຶ້ນມາຕັ້ງຢູ່ ແຂວງ ອັດຕະປື ແລະ ຕີເຂົ້າມາເຖິງ ເມືອງ ໝັ້ນ, ເມືອງ ຄຳທອງ ໄດ້ໝົດ ທຸກເມືອງ (ແຂວງ ສາລາວັນ ໃນປັດຈຸບັນ).

ຝ່າຍພະມະຫາ ອຸປະລາດວໍລະວັງໂສ ເຈົ້າແຜ່ນດິນ ວຽງຈັນ ຄັນໄດ້ຊາບເຫດການດັ່ງນັ້ນ ຈຶ່ງໄດ້ສັ່ງໃຫ້ ພະຍາ ຊຽງໃຕ້, ພະຍາ ຊຽງເໜືອ, ພະຍາ ນະຄອນ ຍົກທັບລົງໄປຕີພວກຂ້າສ່ວຍ ກະບົດກອງທັບຂອງ ພະຍາທັງສາມ ສູ້ພວກກະບົດບໍ່ໄດ້ ຈຶ່ງໄດ້ແຕກຖອຍຄືນມາ. ພວກກະບົດ ເຫັນໄດ້ທ່າດີ ກໍຕີແຫຍ້ຂຶ້ນມາເຖິງ ວຽງຄຸກ ແລະ ລ່ວງມາເຖິງວຽງຈັນ. ພະມະຫາອຸປະລາດວໍລະ ວັງໂສ ເຫັນຈະປ້ອງກັນເມືອງໄວ້ບໍ່ໄດ້ ຈຶ່ງໄດ້ພາເອົາພະມະເຫສີ ແລະ ທິດາສອງຄົນ ຂຶ້ນມາ ທາງເຮືອໄປ ເມືອງ ຫົງສາວະດີ, ກອງທັບກະບົດກໍ່ເຂົ້າຢຶດເອົາ ນະຄອນຫລວງວຽງຈັນ ໄດ້ຢ່າງ ງ່າຍດາຍ.

ສ່ວນເຈົ້າແຜ່ນດິນແຫ່ງ ເມືອງ ຫົງສາວະດີ ຄັນໄດ້ຊາບຂ່າວວ່າ ອານາຈັກລ້ານຊ້າງ ເກີດ ການກະບົດ ໄດ້ເສຍເມືອງໃຫ້ແກ່ພວກຂ້າສ່ວຍ ອັດຕະປື ຈຶ່ງໄດ້ໃຫ້ອິນແຊະນັນສູງ ຜູ້ເປັນມະ ຫາອຸປະລາດ ປະເທດພະມ້າ ຍົກທັບລົງມາປາບພວກກະບົດ. ກອງທັບພະມ້າ ຍົກທັບມາເຖິງ ນະຄອນວຽງຈັນ ກໍເຂົ້າລ້ອມຈັບເອົາຫົວໜ້າກະບົດໄດ້ ແລ້ວກໍສົ່ງຂຶ້ນເມືອງ ຫົງສາວະດີ. ເຈົ້າຫົງ ສາວະດີ ຈຶ່ງສັ່ງໃຫ້ ພະສຸມັງຄະລະໄອຍະໂກໂພທິສັດ ຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານ ຊ້າງອີກ ໃນປີ 1580. ພະອົງປົກຄອງປະເທດ ມາໄດ້ສອງປີ ກໍສິ້ນພະຊົນ ໃນປີ 1582.

ເມື່ອພະສຸມັງຄະລະໄອຍະໂກໂພທິສັດ ສິ້ນພະຊົນໄປແລ້ວ, ພວກເສນາມຸນຕີທັງຫລາຍ ຈຶ່ງໄດ້ແຕ່ງຕັ້ງ ພະຍານະຄອນນ້ອຍ ຊຶ່ງເປັນລູກຂອງ ພະສຸມັງຄະລະໄອຍະໂກໂພທິສັດຂຶ້ນເປັນ

ເຈົ້າແຜ່ນດິນ ພະຍານະຄອນນ້ອຍ ນັ່ງນະຄອນວຽງຈັນ ບໍ່ໄດ້ເຖິງປີ ກໍຖືກຊາວເມືອງ ຄັດຄ້ານ ເພາະບໍ່ແມ່ນເຊື້ອໜໍ່ກະສັດ ຈຶ່ງພ້ອມກັນຈັບສົ່ງໃຫ້ພະມ້າ. ແຕ່ນັ້ນມາ ອານາຈັກລາວລ້ານຊ້າງ ກໍບໍ່ມີເຈົ້າແຜ່ນດິນປົກຄອງເມືອງ ເຖິງ 7 ປີ.

ມາເຖິງ ປີ 1591, ພວກເສນາອາມາດ ແລະ ພະສົງຄະເຈົ້າທັງຫລາຍ ຈຶ່ງພ້ອມກັນຂຶ້ນ ໄປຂໍເອົາ ເຈົ້າ ໜໍ່ເມືອງ ຊຶ່ງເປັນລູກຊາຍຂອງ ເຈົ້າ ໄຊເຊດຖາທິລາດ ທີ່ພະມ້າ ຈັບໄປໃນເມື່ອ ກ່ອນນັ້ນ ກັບຄືນມາເປັນເຈົ້າແຜ່ນດິນແຫ່ງນະຄອນຫລວງວຽງຈັນ. ເມື່ອພະອົງຂຶ້ນປົກຄອງບ້ານ ເມືອງກໍຢູ່ເຢັນເປັນສຸກ ຫົວເມືອງຕ່າງໆ ກໍຫັນມາຊົມຊອບເຈົ້ານະຄອນວຽງຈັນອີກ ແຕ່ເສຍດາຍ ພະອົງຄອງເມືອງໄດ້ 7 ປີ ກໍສິ້ນພະຊົນໄປ ໃນ ປີ 1598, ລວມອາຍຸ ໄດ້ 27 ປີ ເທົ່ານັ້ນ.

ເມື່ອເຈົ້າ ໜໍ່ເມືອງ ສິ້ນພະຊົນໄປແລ້ວ, ໃນປີດຽວກັນນັ້ນ ພວກເສນາອາມາດເຫັນດີເຫັນ ພ້ອມໃຫ້ໄປເຊີນເອົາ ພະວໍລະວົງສາ ເປັນລູກຂອງນ້າສາວ ເຈົ້າ ໜໍ່ເມືອງ ກັບຄືນມາເປັນເຈົ້າ ແຜ່ນດິນ. ດັ່ງນັ້ນ ພວກເສນາອາມາດ ຈຶ່ງຂຶ້ນໄປຂໍເອົານໍ ເຈົ້າ ຫົງສາວະດີ, ແຕ່ພະອົງຍັງນ້ອຍ ພຽງແຕ່ອາຍຸ 13 ປີ ເທົ່ານັ້ນ ຄົງຈະບໍ່ສາມາດປົກຄອງບ້ານເມືອງໄດ້, ເຈົ້າ ຫົງສາວະດີ ຈຶ່ງແຕ່ງ ໃຫ້ບິດາ (ພໍ່) ຂອງພະວໍລະວົງສາ ຊຶ່ງຄົນທັງຫລາຍເອີ້ນກັນວ່າ ພະວໍລະປິຕາ ມາເປັນເຈົ້າ ແຜ່ນດິນນັ່ງເມືອງວຽງຈັນ.

ໃນໄລຍະນີ້ ທາງປະເທດ ພະມ້າ ກຳລັງເກີດຄວາມຫຍຸ້ງຍາກ ເນື່ອງມາຈາກການເສຍຊີ ວິດຂອງ ເຈົ້າ ບູເລງນອງ ແລະ ລູກຊາຍ ເຈົ້າ ນັນທະບູເລງນອງ ໄດ້ຂຶ້ນເປັນເຈົ້າແຜ່ນດິນແທນ, ແຕ່ ເຈົ້າ ນັນທະບູເລງນອງ ພັດເປັນຄົນບໍ່ມີຄວາມສາມາດ ດັ່ງນັ້ນ, ເຈົ້າ ນະເລສວນ ເຈົ້ານະ ຄອນສີອະຍຸທະຍາ ທີ່ເປັນເມືອງຂຶ້ນກັບປະເທດ ພະມ້າ ມາແຕ່ກ່ອນນັ້ນ ຈຶ່ງໄດ້ປະກາດຕົນເປັນ ອິດສະຫລະແລ້ວ ຍົກກອງທັບຂຶ້ນໄປຕີ ເມືອງ ຫົງສາວະດີ.

ໃນເວລານັ້ນ ພວກຄອບຄົວລາວທີ່ພະມ້າ ໄດ້ກວາດເອົາໄປແຕ່ກ່ອນນັ້ນ ມອງເຫັນໂອ ກາດດີ ຈຶ່ງໄດ້ພາກັນອົບພະຍົບຄືນມາ ຝ່າຍເຈົ້າແຜ່ນດິນ ຊຽງໃໝ່ ຊຶ່ງເວລານັ້ນ ກໍຕົກຢູ່ໃຕ້ການ ປົກຄອງຂອງພະມ້າ ຈຶ່ງໄດ້ຍົກທັບອອກມາລັດຕີເອົາຄອບຄົວຄົນລາວ ເພື່ອສົ່ງກັບຄືນໄປປະ ເທດພະມ້າ. ພະວໍລະປິຕາ ໄດ້ຊາບຂ່າວ ດັ່ງນັ້ນ ຈຶ່ງແຕ່ງກອງທັບຂຶ້ນໄປຮັບເອົາຄອບຄົວລາວ ຄືນມາ ກອງທັບລາວຈຶ່ງໄດ້ເຂົ້າຕີເອົາ ເມືອງ ພະເຍົາ, ເມືອງ ເຊີງ, ເມືອງ ລໍ, ເມືອງ ຊຽງແສນ, ເມືອງ ຫາງ, ເມືອງ ຊຽງຮາຍ ໄດ້ໝົດແລ້ວກໍຍົກເຂົ້າລ້ອມ ເມືອງ ຊຽງໃໝ່ ໄວ້ແຕ່ຍັງຕີເຂົ້າເອົາ ເມືອງບໍ່ທັນໄດ້ ພໍດີທະຫານຂາດແຄນດ້ານສະບຽງອາຫານ ແລະ ໄພ່ພົນກໍເລີ່ມເຈັບເປັນລົ້ມ ຕາຍລົງນັບມື້ນັບຫລາຍ. ດັ່ງນັ້ນ, ພວກແມ່ທັບນາຍກອງ ຈຶ່ງໄດ້ຕົກລົງກັນເລີກທັບກັບຄືນນະ ຄອນວຽງຈັນ. ເມື່ອມາເຖິງ ນະຄອນວຽງຈັນ ພະວໍລະປິຕາ ມີຄວາມໂກດຮ້າຍ ໃຫ້ພວກແມ່ທັບ

ວ່າ ບໍ່ຕີເອົາ ເມືອງ ຊຽງໃໝ່ ໄດ້ກ່ອນຈຶ່ງກັບຄືນ ຈຶ່ງບ່ຍອມໃຫ້ກອງທັບເຂົ້າເມືອງ ແລະ ຈະໃຫ້ ປະຫານຊີວິດພວກແມ່ທັບ ແລະ ນາຍກອງທັງໝົດ. ພວກແມ່ທັບ ແລະ ນາຍກອງ ຈຶ່ງເຊີນເອົາ ພະວໍລະວົງສາ ຜູ້ເປັນລູກ ໜີໄປຕັ້ງທັບຢູ່ສະໜາມ ພະລານໄຊ ແລ້ວຍົກເຂົ້າໄປຕີເອົາພະນະ ຄອນ. ສອງພໍ່ລູກສູ້ຮົບກັນຈົນເຖິງ 4 ເດືອນ ໄພ່ພົນລົ້ມຕາຍລົງເປັນຈຳນວນຫຼວງຫຼາຍ, ທັງສອງ ຝ່າຍກໍເກີດຄວາມອຶດຢາກທໍລະມານ, ເມື່ອເຫັນເປັນດັ່ງນັ້ນ ພະສັງຄະເຈົ້າທັງຫຼາຍ ຈຶ່ງອອກໄປ ຂໍພອນໃຫ້ພໍ່ລູກຄືນດີນຳກັນ ພະສັງຄະເຈົ້າ ໄດ້ໄປຊຸມນຸມກັນຢູ່ດອນຈັນ ພະວໍລະວົງສາ ຈຶ່ງເຂົ້າ ມາຂໍຂະມາບິດາ ຊ້ອງໜ້າພະສັງຄະເຈົ້າທັງຫລາຍແລ້ວ ພະວໍລະປັຕາ ກໍມອບບ້ານເມືອງ, ລາ ຊະສົມບັດ ໃຫ້ພະວໍລະວົງສາ, ສ່ວນຕົນເອງກໍໄດ້ພາຄອບຄົວໜີລົງໄປຢູ່ ເມືອງ ນະຄອນພະນົມ ໃນປີ 1603.

5. ເຈົ້າ ວໍລະວົງສາ ທຳມິກະລາດ ປະກາດອິດສະຫລະພາບ ຈາກພະມ້າ.

ໃນເມື່ອເຈົ້າ ວໍລະວົງສາ ທຳມິກະລາດ ໄດ້ຂຶ້ນເປັນເຈົ້າແຜ່ນດິນແທ່ງ ນະຄອນວຽງຈັນ ປະເທດລາວລ້ານຊ້າງ ໃນປີ 1598, ພະອົງໄດ້ຕົກລົງ ປະກາດຕົນເປັນອິດສະຫລະ ບ່ຍອມເປັນ ຫົວເມືອງສ່ວຍໃຫ້ແກ່ປະເທດ ພະມ້າ ອີກ ແລ້ວໄດ້ຮ່ວມເວລາ ທີ່ຕົກເປັນເມືອງສ່ວຍຂອງ ພະ ມ້າ ນານເຖິງ 24 ປີ. ແຕ່ນັ້ນມາ ປະເທດຊາດບ້ານເມືອງ ກໍກັບຄືນສູ່ຄວາມສະຫງົບ ປະຊາລາດ ສະດອນ ມີຄວາມຢູ່ເຢັນເປັນສຸກ, ບໍ່ມີສົງຄາມ, ມີແຕ່ທຳມາຫາກິນ ຢ່າງສະດວກສະບາຍມາໄດ້ ຫລາຍປີ.

ແຕ່ມາເຖິງ ປີ 1621 ເຈົ້າ ວໍລະວົງສາ ທຳມິກະລາດ ພັດພາມະເຫສີ ແລະ ລູກຈຳນວນ ໜຶ່ງຂຶ້ນເມືອໄຫວ້ ພະບາງ ທີ່ນະຄອນຊຽງທອງ (ນະຄອນຫລວງພະບາງ) ກໍພໍດີມີຜູ້ມາສັບສໍ່ ກ່າວຫາຕໍ່ ເຈົ້າ ວໍລະວົງສາ ວ່າພະອຸປະຍຸວະລາດ ທີ່ນະຄອນຫລວງວຽງຈັນ ຈະຍາດຊີງເອົາລາ ຊະສົມບັດ, ພະອົງຈຶ່ງສັ່ງໃຫ້ຈັບເອົາລູກຊາຍກົກໄປປະຫານຊີວິດ, ຝ່າຍພະອຸປະຍຸວະລາດໄດ້ຮູ້ ຕົວກ່ອນ ຈຶ່ງໄດ້ພາໄພ່ພົນ ຂອງຕົນລັກໜີໄປຕັ້ງຢູ່ວຽງຄຸກ.

ຝ່າຍເຈົ້າ ວໍລະວົງສາ ທຳມິກະລາດ ກໍໄດ້ເກນພົນທະຫານຢ່າງຫລວງຫລາຍ ແລ້ວກໍຍົກ ທັບລົງມາຈາກ ຫລວງພະບາງ ເພື່ອນຳໄລ່ຕິດຕາມຕີ ພະອຸປະຍຸວະລາດ ຈຶ່ງໄດ້ມາຕັ້ງທັບຢູ່ ບ້ານ ທ່າແຂກ (ເມືອງຫາດຊາຍຟອງ ດຽວນີ້). ໃນເວລານັ້ນ, ພວກເສນາອາມາດຜູ້ໃຫຍ່ ແລະ ພະຍາທັງຫລາຍ ໄດ້ເຂົ້າຝ່າຍ ພະອຸປະຍຸວະລາດ ໝົດ. ຈາກນັ້ນ, ເສນາອາມາດທັງຫລາຍ ຈຶ່ງ ໄດ້ເຊີນເອົາ ພະອຸປະຍຸວະລາດ ຂຶ້ນເປັນເຈົ້າແຜ່ນດິນ ວຽງຈັນ ໃນປີ 1622. ພະອົງປົກຄອງມາ ໄດ້ 9 ເດືອນ ກໍສິ້ນພະຊົນໄປ.

ຕໍ່ຈາກນັ້ນ ບັນດິດໂພທິສານ ກໍໄດ້ຮັບເຊີນໃຫ້ຂຶ້ນເປັນເຈົ້າແຜ່ນດິນ, ແຕ່ກ່ອນເອີ້ນວ່າ ພະຍາ ມະຫານາມ ເປັນເຈົ້າຄອງນະຄອນເມືອງສີໂຄດຕະບອງ. ພະອົງປົກຄອງມາໄດ້ສອງປີຄື ໃນປີ 1624 ພະຍາ ວຽງ ຄິດການກະບົດ ໄດ້ຈູດເຜົາ ຫໍໂຮງສະໜາມຫຼວງ ແລ້ວພະອົງກໍ່ໄດ້ສ້າງ ໂຮງໃໝ່ຂຶ້ນແທນທີ່ເດີ່ນພະລານໄຊ. ມາເຖິງປີ 1627, ພະອົງກໍໄດ້ສິ້ນພະຊົນໄປ. ແລະ ໃນປີ ນັ້ນເອງ, ລູກຜູ້ທີ່ສອງຂອງພະວໍລະວົງສາທຳມິກະລາດ ຄືພະໜ່ອມແກ້ວ ກໍໄດ້ຂຶ້ນເປັນເຈົ້າແຜ່ນ ດິນ ນະຄອນວຽງຈັນ ອານາຈັກລາວລ້ານຊ້າງ. ໃນເວລານີ້ເຫດການບ້ານເມືອງ ຍິ່ງເພີ່ມທະວີ ຄວາມຮ້າຍແຮງຂຶ້ນ ເນື່ອງມາຈາກເຈົ້ານາຍອ້າຍນ້ອງຍາດຊິງກັນເປັນໃຫຍ່ ມີຄວາມຄຶດຄຽດ ແຄ້ນກັນບໍ່ແລ້ວບໍ່ເລີ່ກ. ຕ່າງຝ່າຍກໍຕ່າງເຕົ້າໂຮມເອົາບ່າວໄພ່ຂອງໃຜລາວ ເຂົ້າປະຫັດປະຫານ ກັນ ຈົນປະຊາຊົນພົນລະເມືອງ ໃນນະຄອນວຽງຈັນ ຢູ່ບໍ່ໄດ້ ຕ້ອງອົບພະຍົບໜີໄພຂ້າມນ້ຳຂອງ ລົງໄປຕັ້ງຖິ່ນຖານທຳມາຫາກິນຢູ່ທາງຝັ່ງຂວາ ເປັນຈຳນວນຫຼວງຫຼາຍ ແລະ ແຜ່ຂະຫຍາຍ ລົງ ໄປຈົນຮອດຊາຍແດນປະເທດຂະເໝນ. ພະໜ່ອມແກ້ວ ໄດ້ປົກຄອງບ້ານເມືອງ ໄດ້ 10 ປີ ຈຶ່ງ ໄດ້ສິ້ນພະຊົນໄປ ໃນ ປີ 1638.

III. ນະຄອນຫລວງວຽງຈັນ ຮຸ່ງເຮືອງໃນສະໄໝ ເຈົ້າ ສຸລິຍະວົງສາທຳມິກະ ລາດ (ປີ 1638 ເຖິງປີ 1695).

1. ບາງບັນທຶກຂອງຊາວ ຕາເວັນຕົກ ທີ່ໄດ້ມາພົບເຫັນ

ມາເຖິງສະໄໝເຈົ້າ ສຸລິຍະວົງສາ, ນະຄອນຫລວງວຽງຈັນ ກໍໄດ້ຮຸ່ງເຮືອງເຫລື້ອງເຫລື້ອມ ໃນທຸກດ້ານ ຈົນທ່ານ ວັນ ວູດສະໂຕບ (Van Wusthof) ຊາວໂຮນລັງ ທີ່ມາລາວ ໃນປີ 1641 ໄດ້ຍ້ອງຍໍວ່າ: " ພຸດທະສາສະໜາ ຈະເລີນຮຸ່ງເຮືອງຫລາຍ, ພະສົງໃນ ນະຄອນຫລວງວຽງຈັນ ມີຫລາຍກວ່າທະຫານໃນກອງທັບເຈົ້າແຜ່ນດິນ ເຢຍລະມັນ ອີກຊ້ຳ ແລະ ມີວັດວາອາຮາມໃຫຍ່ ແລະ ງົດງາມກວ່າປະເທດອື່ນ, ການສຶກສາຮ່ຳຮຽນກໍສຳຄັນກວ່າປະເທດອື່ນ, ດ້ວຍເຫດນີ້ ຈຶ່ງ ມີພະສົງຈາກປະເທດສະຫຍາມ, ປະເທດຂະເໝນ ມາສຶກສາຢູ່ທີ່ນີ້ເຖິງ 10 ປີ ຫລື 12 ປີ ກ່ອນ ຈະສຳເລັດໃນວິຊາໜຶ່ງໆ".

ດົນອີຕາລີ ຄຸນພໍ່ ມາຣິນີ ແລະ ເລີຣີອາ (Marini , Leria) ໄດ້ເຂົ້າມາ ນະຄອນວຽງຈັນ ໃນປີ 1642 ເຖິງປີ 1647 ໄດ້ບັນທຶກໄວ້ວ່າ: " ໃນຈຳນວນອານາຈັກທີ່ເຂັ້ມແຂງທັງຫລາຍຂອງ ປະເທດອາຊີຕາເວັນອອກນັ້ນ ມີປະເທດໜຶ່ງທີ່ບໍ່ມີຜູ້ຮູ້ຈັກ... ປະເທດນັ້ນເຂົາເອີ້ນວ່າ: ປະເທດ ລາວ ຫລື ປະເທດລ້ານຊ້າງ. ປະເທດນີ້ມີພູເຂົາສູງອ້ອມທຸກດ້ານ, ມີທົ່ງຮາບປະກອບດ້ວຍດິນ ດີ ແລະ ສິ່ງທຳມະຊາດນາໆປະການ ທີ່ເປັນປະໂຫຍດໃຫ້ແກ່ຊີວິດ ນອກຈາກພູເຂົາທີ່ເປັນຮົ້ວ ອ້ອມປະເທດ ເພື່ອປ້ອງກັນສັດຕູຕ່າງປະເທດແລ້ວ ກໍຍັງມີປ່າດົງພົງໄພຕຶບໜາ ແລະ ໄມ້ຫລາຍ

ຊະນິດພັນ. ຕົ້ນໄມ້ເລົ່ານີ້ລ້ວນແຕ່ມີລຳໃຫຍ່ສູງຕາມຕີນພູ ແລະ ເປີ້ນພູທັ້ງໝົດນີ້ ເປັນຮົ້ວອ້ອມແຜ່ນດິນຂອງລາວ".

" ເມືອງແມ່ນບ່ອນທີ່ເຈົ້າແຜ່ນດິນປະທັບຢູ່ເປັນປົກກະຕິ ຕັ້ງຢູ່ກາງຣາຊະອານາຈັກ. ພະນະຄອນ ຮຽກວ່າ: ລ້ານຊ້າງ (ຄົງຈະແມ່ນ ນະຄອນວຽງຈັນ ນັ້ນເອງ). ເບື້ອງໜຶ່ງມີກຳແພງອ້ອມສູງ ແລະ ມີຄອງນ້ຳກວ້າງເລິກ. ອີກດ້ານໜຶ່ງມີນ້ຳຂອງຂັ້ນຢູ່ ອັນເປັນກຳແພງປ້ອງກັນສັດຕູໄດ້ດີ. ພະຣາຊະວັງ ມີໂຄງສ້າງທີ່ສົມສ່ວນກົມກືນ ແລະ ສະຫງ່າງາມ ເມື່ອແນມແຕ່ໄກກໍເຫັນເປັນຍອດໆ. ຕາມຄວາມຈິງແລ້ວ ພະຣາຊະວັງ ນີ້ແມ່ນກວ້າງໃຫຍ່ທີ່ສຸດ ພາໃຫ້ເຂົ້າໃຈວ່າເປັນເມືອງໃຫຍ່ແຫ່ງໜຶ່ງ ທີ່ມີຄົນຢູ່ເປັນຈຳນວນຫລາຍ ".

" ຫໍໂຮງຂອງເຈົ້າແຜ່ນດິນ ມີປະຕູໂຂງ ຄວັດເປັນລວດລາຍງາມທີ່ສຸດ ນອກນັ້ນກໍມີຫຼາຍຫ້ອງອີກທີ່ງົດງາມ ເກືອບເທົ່າໆກັນ ແລະ ມີຫ້ອງໜຶ່ງທີ່ກວ້າງໃຫຍ່ກວ່າ. ໄມ້ທີ່ໃຊ້ປຸກ ຫໍໂຮງ ນີ້ ເປັນໄມ້ເນື້ອແຂງ ຄວັດເປັນລວດລາຍ ທັ້ງພາຍນອກ ແລະ ພາຍໃນຢ່າງງົດງາມທີ່ສຸດ ແລະ ພອກດ້ວຍ ຄຳປົວ ອັນພາໃຫ້ຮູ້ສຶກວ່າ ແມ່ນເອົາຄຳແທ້ໆ ມາປະດັບໃສ່, ເດີ່ນພະຣາຊະວັງ ນັ້ນ ກວ້າງຂວາງຫລາຍ ມີເຮືອນປຸກລຽນກັນເປັນແຖວ ກໍດ້ວຍດິນຈີ່ ແລະ ມຸງດ້ວຍດິນຂໍ ສ້າງໄວ້ສຳລັບຄົນໃຊ້ ແລະ ຂຸນນາງຜູ້ໃຫຍ່, ຖ້າຈະໃຫ້ບັນລະຍາຍຢ່າງລະອຽດ ເຖິງຄວາມອຸດົມຮັ່ງມີ ຂອງ ຫໍໂຮງ, ສວນອຸທະຍານ ແລະ ສິ່ງອື່ນໆ... ໃນພະຣາຊະວັງນີ້ແລ້ວ ຂ້າພະເຈົ້າຄົງຈະຂຽນເປັນປຶ້ມຫົວໃຫຍ່ເຫລັ້ມໜຶ່ງຕ່າງຫາກ".

(ໃນນີ້ຄວາມໝາຍຂອງ ພະຣາຊະວັງ ນັ້ນ ແມ່ນ ນະຄອນຫລວງວຽງຈັນ ນັ້ນເອງ, ເພາະກວ້າງໃຫຍ່, ສ່ວນພະຣາຊະວັງແທ້ໆນັ້ນ ແມ່ນສະຖານທີ່ ຫໍຄຳ ດຽວນີ້ເທົ່ານັ້ນ).

" ເຄຫາສະຖານຂອງເຈົ້ານາຍຜູ້ໃຫຍ່ ແລະ ພວກເສດຖີ ນັ້ນໃຫຍ່ສູງ ແລະ ງົດງາມທີ່ສຸດ ເຮັດດ້ວຍໄມ້ ແລະ ມີຮູບຄ້ວດລາຍໃສ່ຫລາຍ ຫລື ໜ້ອຍ ຕາມຖານະຂອງເຈົ້າຂອງເຮືອນ, ສ່ວນພວກໄພ່ນ້ອຍລາຊະດອນນັ້ນ ບໍ່ໄດ້ຢູ່ເຮືອນງາມເລົ່ານັ້ນເລີຍ, ມັນເປັນເຮືອນເສົາຕັ້ງເປັນເຮືອນມຸງຫຍ້າ ຫລື ຮ້ອງວ່າ ຕູບ ກໍວ່າໄດ້, ມີແຕ່ພະສົງອົງຄະເຈົ້າເທົ່ານັ້ນ ຈຶ່ງໄດ້ຢູ່ເຮືອນດີແດ່ ເພາະເພິ່ນມີສິດປຸກເຮືອນດ້ວຍຫີນ ".

ບົດບັນທຶກຂ້າງເທິງນີ້ ເຮັດໃຫ້ເຫັນແຈ້ງວ່າ ຄວາມສີວິໄລໃນສະໄໝລາຊາຊະການ ຂອງ ເຈົ້າ ສຸລິຍະວົງສາ ນັ້ນ ແມ່ນບໍ່ຕ່ຳຕ້ອຍໃຫ້ແກ່ນະຄອນໃດ ໃນອາຊີ: ມີການປ້ອງກັນຊາດເຂັ້ມແຂງ, ມີປະເທດເພື່ອນມິດຫລາຍ, ການປົກຄອງມີສົມທຳ ເສດຖະກິດ ການຄ້າ ຂະຫຍາຍຕົວ, ປະຊາຊົນ ມີຄວາມສະຫງົບສຸກ, ການສຶກສາ ວັດທະນະທຳ ກໍມີຄວາມຈະເລີນຮຸ່ງເຮືອງຫລາຍ, ຊຶ່ງພວກເຮົາເຄີຍເວົ້າວ່າ " **ຍຸກຄຳ** ". ນະຄອນວຽງຈັນ ສີສັດຕະນາກ ໄດ້ຢືນເປັນເມືອງເອກແຫ່ງ

ອາມາຈັກລາວລ້ານຊ້າງຮົ່ມຂາວ ມາໄດ້ 290 ປີ ຢ່າງສະຫງ່າລາສີ ໃນໂຫ້ງແມ່ນ້ຳຂອງ ແຫ່ງນີ້ ດ້ວຍສະຖາປັດຕະຍະກຳ, ສິລະປະກຳ ແລະ ວັດທະນະທຳ ອັນເປັນເອກະລັກ ຂອງລາວແທ້.

2. ທີ່ຕັ້ງ ພູມີສາດ ຂອງນະຄອນຫຼວງວຽງຈັນ.

1. ທີ່ຕັ້ງ: ນະຄອນວຽງຈັນ ຕັ້ງຢູ່ລະຫວ່າງເສັ້ນຕັ້ງ 104˚ ຫາ 105˚ (Longitude) ແລະ ເສັ້ນຂະໜານທີ່ 18˚ (Longitude) ຂອງໜ່ວຍໂລກ, ຢູ່ກ້ຳຊ້າຍຂອງແມ່ນ້ຳຂອງໃນພາກກາງ ຂອງລາວ ປະຊາຊົນວຽງຈັນ ອາໄສແມ່ນ້ຳຂອງ, ນ້ຳປ່າສັກ, ນ້ຳງື່ມ, ທົ່ງພຽງອ້ອມແອ້ມທີ່ກວ້າງ ຂວາງ ພ້ອມດ້ວຍປ່າດົງພົງໄພ ໜອງບຶງ ແລະ ຫ້ວຍຮ່ອງ ທີ່ຫລວງຫລາຍ ເພື່ອດຳລົງຊີວິດໃນ ເຂດນີ້ຢ່າງສະຫງົບ ມາໄດ້ຫລາຍພັນປີມາແລ້ວ. ແມ່ນ້ຳຂອງ, ໜອງບຶງ, ຫ້ວຍຮ່ອງ, ພູເຂົາປ່າ ດົງໄດ້ກາຍເປັນຮົ້ວປ້ອງກັນ ນະຄອນຫລວງວຽງຈັນ ແບບທຳມະຊາດຢ່າງສົມບູນແບບ. ຕາມ ຜົນງານຄົ້ນຄວ້າຂອງນັກ ປະຫວັດສາດ ຫລາຍທ່ານເຄີຍເວົ້າວ່າ: ປະຊາຊົນຊາວວຽງຈັນ ເຖົ້າ ແມ່ນມາຈາກຫລາຍແຫ່ງຫລາຍທີ່ ກຳສາມັກຄີກັນ, ດຸໝັ່ນປູກຝັງລ້ຽງສັດ, ເຮັດຫັດຖະກຳ: ຕ່ຳ ແຜ່ນ, ຕີເຫລັກ ແລະ ປັ້ນດິນເຜົາ... ຊຶ່ງສິ່ງເລົ່ານີ້ໄດ້ຄົ້ນພົບໃນເວລາປຸກສ້າງອາຄານໃໝ່, ສ້າງ ຖະໜົນຫົນທາງຕ່າງໆ ໃນສະຕະວັດທີ 20 ນີ້.



ນະຄອນຫຼວງວຽງຈັນ ໃນສະໄໝອານາຈັກລ້ານຊ້າງຮຸ່ງເຮືອງ

ການວາງຜັງເມືອງວຽງຈັນ: ໃນສະໄໝນັ້ນ, ເພິ່ນໄດ້ຖືເອົາກົດສຳຄັນ ໃນການຊີ້ນຳປະຕິບັດເຊັ່ນ:

- ຕ້ອງຖືເອົາປູສະນີຍະສະຖານ, ອານຸສອນສະຖານເປັນຫລັກ ເພື່ອຮັກສາໄວ້ແຫ່ງວັດທະນະທຳລາວ.

-ຕ້ອງຖືເອົາຜາສາດຣາຊະວັງ, ຫໍໂຮງຂອງເຈົ້ານາຍຜູ້ໃຫຍ່, ສຳນັກງານທາງຣາຊະການ, ຖະໜົນຕ່າງໆ... ເປັນຫລັກ.

- ຕ້ອງປົກປັກຮັກສາທີ່ຕັ້ງທາງທະຫານ ເພື່ອຄວາມປອດໄພຂອງບ້ານເມືອງ ເຊັ່ນ: ກຳແພງເມືອງ ບໍ່ມີຜູ້ໃດແຕະຕ້ອງໄດ້.

- ນອກຈາກນີ້ ກໍແມ່ນຮັກສາ ສາທາລະນະປະໂຫຍດ ຂອງບ້ານເມືອງເຊັ່ນ: ປ່າຊ້າ, ສວນອຸທະຍານ, ນາ, ຫ້ວຍຮ່ອງໜອງບຶງຕ່າງໆ. ແລ້ວໃຫ້ປູກໄມ້ຈວງ, ໄມ້ຈັນຫອມເອ້ໄວ້ຕາມແຄມຂອງ.


ເຈົ້າແຜ່ນດິນໄດ້ມອບສິດໃຫ້ເຈົ້າເມືອງວຽງຈັນ ເປັນຜູ້ຈັດຕັ້ງປະຕິບັດ: ວາງແຜນ, ນຳພາກໍ່ສ້າງ, ເກນແຮງງານ ແລະ ຈ່າຍຄ່າແຮງງານ. (ຍົກເວັ້ນການກໍ່ສ້າງວັດ ທີ່ເປັນສັດທາຂອງປະຊາຊົນເອງ). ໃນເວລານັ້ນເຖິງແມ່ນວ່າບໍ່ທັນມີກົດໝາຍກໍ່ສ້າງກໍຕາມ, ບັນດາເຈົ້າເມືອງກໍຖືເອົາກົດ 4 ຢ່າງ ຂອງເຈົ້າແຜ່ນດິນເປັນຫລັກ ໃນການປະຕິບັດບວກກັບຮີດຄອງປະເພນີຂອງລາວອີກເຊັ່ນວ່າ: ບໍ່ເຮັດວຽກໃນວັນສິນ, ບໍ່ປຸກເຮືອນ ຫລື ສິມ ຕັດຂວາງແມ່ນ້ຳຂອງ, ບໍ່ປິ່ນໜ້າໄປທາງຕາເວັນຕົກເດັດຂາດ, (ຍົກເວັ້ນວັດສີສະເກດ ທີ່ໄດ້ສ້າງມາກ່ອນແລ້ວ) ປະຊາກອນບໍ່ປຸກເຮືອນສູງກວ່າວັດຫໍໂຮງ ແລະ ຣາຊະວັງ. ເຈົ້າເມືອງຈະມີສະຖາປະນິກ ແລະ ສິນລະປະກອນມາຊ່ວຍພາລະກິດຂອງຕົນເປັນປະຈຳ ແຕ່ບໍ່ຄ່ອຍຈະອອກຊື່ຂອງຕົນປານໃດ ເພາະເປັນຂ້າຣາຊະການ. ສ່ວນທີ່ປຶກສາຂອງເຈົ້າເມືອງ ແມ່ນເຈົ້າອາວາດວັດຕ່າງໆທີ່ມີຢູ່ ແລະ ເຖົ້າແກ່ລຸງຕາໃນບ້ານໃນ ເມືອງວຽງຈັນ ນັ້ນເອງ.

ນະຄອນຫລວງວຽງຈັນເກົ່າ ມີເນື້ອທີ່ປະມານ 103 ເຮັກຕາ (ໃນກຳແພງເມືອງ ຊັ້ນໃນເທົ່ານັ້ນ), ຊຶ່ງເນື້ອທີ່ຂອງວັດວາອາຮາມ ກວມ 18%, ທີ່ຢູ່ອາໄສ 62% ແລະ ເນື້ອທີ່ທາງຣາຊະການປະມານ 20% ຈຳນວນຫຼັງຄາເຮືອນໃນເວລານັ້ນ ມີປະມານ 6,000 ເຖິງ 8,000 ຫຼັງ ຫຼື ປະມານ 40,000 ຫາ 50,000 ຄົນ (ບໍ່ນັບພະສົງ ແລະ ທະຫານ) ສ່ວນປະຊາຊົນຜູ້ເຮັດໄຮ່ເຮັດນາຢູ່ນອກເມືອງນັ້ນ ກໍບໍ່ໄດ້ນັບເຂົ້າຄືກັນ.

ທີ່ຕັ້ງແຫ່ງນີ້ເໝາະສົມທີ່ສຸດ ທີ່ເປັນເມືອງເອກ ແຫ່ງອານາຈັກລາວລ້ານຊ້າງ ເພື່ອຊີ້ນຳ ແລະ ປົກຄອງຫົວເມືອງຕ່າງໆ ໄດ້ງ່າຍ ອັນເນື່ອງມາຈາກມີແມ່ນ້ຳຂອງໄຫຼຜ່ານທາງກາງ ອັນ

ເປັນໃຈກາງແຫ່ງການຄົມມະນາຄົມ ແລະ ຂົນສົ່ງ. ໃນເວລານັ້ນ ນະຄອນຫລວງວຽງຈັນ ໄດ້ກວມເອົາສ່ວນໜຶ່ງຂອງ ຝັ່ງຂວາຂອງແມ່ນ້ຳຂອງ ເຊັ່ນ: ສີຊຽງໃໝ່ ແລະ ທ່າບໍ່.

2. ກຳແພງເມືອງ: ຊຶ່ງສ້າງເປັນຮົ້ວປ້ອງກັນ ນະຄອນຫລວງວຽງຈັນ ນັ້ນມີຢູ່ນຳກັນ 2 ຊັ້ນ ຄື: ກຳແພງເມືອງຊັ້ນໃນ ແລະ ກຳແພງ ເມືອງຊັ້ນນອກ ຊຶ່ງສ້າງຕາມຫລັງ.




ແຜນທີ່ກຳແພງເມືອງຊັ້ນໃນ ແລະ ຊັ້ນນອກ

+ ກຳແພງເມືອງ ຊັ້ນໃນ.

ກຳແພງເມືອງຊັ້ນໃນ ໄດ້ເລີ້ມຈາກ ປາກນ້ຳປ່າສັກ ເບື້ອງໃຕ້ ໄປຕາມທິດເໜືອ ເຖິງ 5 ແຍກໂຮງລະຄອນລຳ (ຖະໜົນ ຂົວຫລວງ, ຖະໜົນ ທ່ຽງຂັນຄຳ ແລະ ຖະໜົນ ຊຸນບູລົມ ມາພົບກັນ), ແລ້ວລ້ຽວໄປທິດຕາເວັນອອກ ລົງໄປຕາມຖະໜົນຄູວຽງ ຈົນເຖິງ ປາກຫ້ວຍຂາວ ຫລັກ 3 (ບ່ອນຖະໜົນທ່າເດື່ອ ກັບຖະໜົນຄູວຽງ ຄົບກັນ) ຍາວປະມານ 5 ກິໂລແມັດ. ຕົ້ນສະຕະວັດ ທີ 20 ກໍຍັງເຫັນກຳແພງເມືອງ ໃນຝັ່ງຂວາແມ່ນ້ຳຂອງ ຄືເລີ່ມຈາກ ບ້ານ ພັນພ້າວ (ທ່າບໍ່ ອອກ ໄປເຖິງ ສີຊຽງໃໝ່ ຍາວປະມານ 3 ກິໂລແມັດ. ກຳແພງຊັ້ນໃນນີ້, ຍາວທັງໝົດປະມານ 8 ກິໂລ ແມັດ ເປັນກຳແພງຊັ້ນໃນ ເພື່ອປ້ອງກັນ ນະຄອນຫລວງວຽງຈັນ. (ຖະໜົນຊຸນບູລົມ ແລະ ຖະ ໜົນ ຄູວຽງ ແມ່ນໄດ້ສ້າງຂຶ້ນໃສ່ເທິງຊາກສະຫລັກຫັກພັງ ຂອງກຳແພງເມືອງຊັ້ນໃນ ໃນຕົ້ນສະ ຕະວັດທີ 20 ນີ້).


ກຳແພງນີ້ ກໍດ້ວຍດິນຈີ່ບໍ່ໃສ່ປະທາຍ (ເອົາດິນໜຽວແທນໂຄງກໍ່ສ້າງຢ່າງຟ້າວຟັ່ງ)ສ່ວນ ດິນທີ່ຂຸດຈາກດິນນອກກຳແພງເມືອງ ແມ່ນເອົາມາຖົມຄູນຂຶ້ນໃສ່ເບື້ອງໃນ. ສ່ວນທີ່ຂຸດອອກນັ້ນ ກວ້າງປະມານ 10 ຫາ 20 ແມັດ ໄດ້ກາຍເປັນຮ່ອງນ້ຳ ທີ່ໄຫລຈາກນ້ຳປ່າສັກລົງໃສ່ຫ້ວຍຂາວ ເລີຍ ແລະ ອີກດ້ານໜຶ່ງກໍເປັນຄອງຕໍ່ໃສ່ຮ່ອງແກໄປຫາບຶງທາດຫລວງອີກ. ສະເພາະກຳແພງທີ່ ກໍດ້ວຍດິນຈີ່ນັ້ນ ມີຄວາມໜາ 1,5 ຫາ 2 ແມັດ, ສູງ 4,50 ເຖິງ 5 ແມັດ, ຕໍ່ດ້ວຍສິ່ງກຳບັງແບບ ໃບເສມາ ສູງ 1,5 ແມັດ ແລ້ວນຳເອົາດິນມາຄູນເສີມເບື້ອງໃນຂຶ້ນຕື່ມ ຊຶ່ງເບື້ອງເທິງກວ້າງ 1,5 ຫາ 2 ແມັດ ໃຊ້ເປັນທາງເດີນ ເພື່ອຍ້າຍກຳລັງໃຫ້ທັນກັບສະພາບການ .



ກຳແພງເມືອງ ຊັ້ນໃນ (ຮູບຜ່າຕັດ)

ກຳແພງເມືອງຊັ້ນໃນ ແລະ ຊັ້ນນອກນີ້ ໄດ້ເຫັນແຈ້ງໃນຮູບຖ່າຍທາງອາກາດຂອງອັງກິດ Royal Air Force 13/04/1946, SGI ຂອງຝຣັ່ງໃນປີ 1952 ແລະ ຂອງອາເມລິກາ AMS 20/01/1958.

ຢູ່ດ້ານເທິງຂອງກຳແພງ ເຕັມໄປດ້ວຍໃບເສມາ ສ້າງໄວ້ເພື່ອບັງກະສູນປືນ ຫລື ລູກໜ້າ ຊຶ່ງມີລັກສະນະດັ່ງນີ້: ໜາ 80 ຊຕມ, ກວ້າງ 100 ຊຕມ, ສູງ 150 ຊຕມ, ລະຫວ່າງໃບເສມາ 40 ຊຕມ, ກໍ່ດ້ວຍດິນຈີ່ແດງ ແລະ ງິດງາມ (ມີຮູບຖ່າຍຂອງໃບເສມານີ້ໃນໜ້າ 336 ຂອງປຶ້ມ Recherches nouvelles sur le Laos 2008 EFEO)




ໃບເສມາ ເທິງກຳແພງ (ເປັນສິ່ງກຳບັງ).

ປະຕູເມືອງ: ບາງທ່ານຊຽນວ່າ ມີ 2 ປະຕູເມືອງ, ແຕ່ທ່ານ ຣາແກດ (A.Raquez) ທີ່ ມາລາວໃນປີ 1900 ໄດ້ພົບເຫັນມີ 3 ປະຕູເມືອງ ດັ່ງທ່ານ ເລີເບຼເວກ (Longitude) ໄດ້ແຕ້ມ ໃສ່ໃນແຜນທີ່ 1895 ນັ້ນແທ້ເປັນຮູບ 6 ລ່ຽມ. ແຕ່ລະປະຕູແມ່ນເປັນປະຕູໂຂງສ້າງດ້ວຍສີມີອັນ ປານິດ ແລະ ຊ້າງກໍລອດໄດ້ທັງຄົນ ແລະ ສະລ່ຽງ. ບາງປະຕູແມ່ນເຮັດດ້ວຍໄມ້ແກ່ນ ໜາແໜ້ນ ດີ ຍາກທີ່ຈະທຳລາຍໄດ້. (ຂ້າພະເຈົ້າຄິດວ່າ ໜ້າຈະມີປະຕູເມືອງອື່ນອີກ ໄຂໄປຫາ ໂສກປ່າ ຫລວງ ແລະໄປຫາເມືອງຫາດຊາຍຟອງ, ມີແຕ່ການຂຸດຄົ້ນຕໍ່ໄປຈຶ່ງຈະພິສູດຫາຄວາມ ຈິງໄດ້).

ປະຕູທີ 1: ໄຂໄປຫາບ້ານ ສີໄຄ ເກົ້າລ້ຽວ ຕິດກັບຂົວຂ້າມ ປາກນ້ຳປ່າສັກ ໂດຍຜ່ານ ທ່າເຮືອ, ບ້ານ ສີຖານ, ບ້ານ ອູບມຸງ, ບ້ານ ວັດໄຕ. ຕາມແຜນທີ່ຂອງເລີເບຼເວກ (Longitude) ບອກວ່າເໜືອ ປາກນ້ຳປ່າສັກ ມີທ່າເຮືອແລ້ວ (Messageries fluviales) ແລະ (Marine) ອັນໝາຍເຖິງທະຫານເຮືອຂອງຝຼັ່ງ ສະນັ້ນ ທີ່ນີ້ເປັນທ່າເຮືອມາກ່ອນແລ້ວໃນສະໄໝອານາຈັກ ລາວລ້ານຊ້າງ ເພາະວ່າ ທ່ານ ວັນ ວູດສະໂຕບ ກໍໄດ້ເອົາເຮືອມາຈອດ ແລະ ພັກຢູ່ທີ່ນີ້ .

ອີງຕາມປຶ້ມແປເປັນພາສາລາວ " ທ່ານ ວັນ ວູດສະໂຕບ ເດີນທາງມາລາວ " ໂດຍ ທ. ທຸມພັນ ລັດຕະນະວົງ.

ເປັນຫຍັງຈຶ່ງແມ່ນທ່າເຮືອ ປາກນ້ຳປ່າສັກ ກ້ຳເໜືອ ? ເພາະວ່າແຕ່ເດືອນ ພະຈິກ ມາຈະມີດອນຈັນ ເກີດຂຶ້ນ ບໍ່ສາມາດລົງມາຈອດໃຕ້ໄດ້ ແລະ ລະບຽບຂອງຣາຊະວັງ ກໍຫ້າມເຮືອພາຍນອກລ່ວງລ້ຳເຂົ້າມາໃນເຂດເທດສະບານ.



ແຜນທີ່ຂອງ Le Blevec 1895 (ສະບັບເດີມ)


ປະຕູທີ 2: ແມ່ນໄຂໄປສູ່ຫລວງພະບາງ (5 ແຍກໂຮງລະຄອນລຳ) ໄກຈາກປະຕູທີ1 ປະມານ 1 ກິໂລແມັດ, ປະຕູນີ້ກໍ່ສ້າງແບບດຽວກັນກັບປະຕູທີ 1 ແລະ ຕໍ່ໜ້າປະຕູທີ 2 ກໍມີຂົວຂ້າມນ້ຳປ່າສັກ ເຊັ່ນດຽວກັນ ຊຶ່ງຄົນວຽງຈັນເຄີຍຮ້ອງກັນວ່າ ຂົວຫລວງ ແລະ ບ້ານນີ້ ກໍແມ່ນບ້ານ ຂົວຫລວງ ນັ້ນເອງ ຈຶ່ງມີຊື່ມາເຖິງທຸກວັນນີ້.

ປະຕູທີ 3: ແມ່ນໄຂໄປສູ່ພະທາດຫລວງ (ຢູ່ 4 ແຍກໄຟແດງຕະຫລາດເຊົ້າ ຕິດກັບ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ). ເມື່ອມາໄຫວ້ ເຈົ້າ ສຸລິຍະວົງສາ ທີ່ພະທາດຫລວງວັນ ວູດສະໂຕບ ໄດ້ຂຽນໃນທຳນອງທີ່ວ່າ: " ເຈົ້າແຜ່ນດິນ ໄດ້ສົ່ງຊ້າງ 6 ຕົວ ມາຮັບເອົາເຖິງທີ່ພັກຂອງຕົນ (ເໜືອປາກນ້ຳປ່າສັກ) ແລ້ວຜ່ານປະຕູເມືອງເຂົ້າໄປ (ຄົງຈະແມ່ນປະຕູທີ 1) ຈຶ່ງມອງເຫັນ ຫໍໂຮງ ພົ້ນສູງຈາກກຳແພງ ດ້ວຍຫລັງຄາທີ່ມີຈອມແຫລມ ແລະ ງົດງາມເປັນພິເສດ ແລ້ວກໍເດີນທາງໄປທາດຫລວງ " (ໂດຍຜ່ານປະຕູທາດຫລວງແນ່ນອນ).


ທ່ານ ກາກນີເອ (F.Garnier) ສັນຊາດຝຼັ່ງ ທີ່ມາລາວໃນປີ 1873 ໄດ້ຂຽນໄວ້ວ່າ:" ສະພາບກຳແພງເມືອງຍັງດີຢູ່, ຮ່ອງກໍມີນ້ຳຢູ່, ສ່ວນປະຕູເມືອງ ເປັນປະຕູໂຂງ ທີ່ແຂງແກ່ນ ແລະ ແໜ້ນໜາດີ ຊຶ່ງເປັນປະຕູອອກສູ່ຊົນນະບົດ (ຮູບພາບທີ 4)".

ປ້ອມປາການ:


ລະຫວ່າງ 2 ປະຕູເມືອງໃດ ມີປ້ອມປາການ 3 ຫາ 4 ປ້ອມ ສູງກວ່າກຳແພງ 2 ຫາ 3 ແມັດ ເປັນຮູບ 5 ຫລ່ຽມ ແລະ ມີໃບເສມາ ແບບດຽວກັນຕັ້ງຢູ່. ປ້ອມປາການ ແມ່ນສູງ 8 ແມັດ ພໍທີ່ຈະສັງເກດເຫັນໄດ້ວ່າ ກຳລັງສັດຕູຈະມາໃນທິດໃດ.



ຮູບປະຕູເມືອງ



ຮູບຜ່າຕັດປະຕູເມືອງ



ຮູບປ້ອມປາການ


ຮູບຜ່າຕັດປ້ອມປາການ

ລະຫວ່າງປະຕູທີ 1 ໄປຫາປະຕູທີ 2 (ປະຕູຫລວງພະບາງ) ມີ 3 ປ້ອມປາການ, ຈາກ ປະຕູທີ 2 ໄປຫາປະຕູທາດຫລວງ ມີ 4 ປ້ອມປາການ ຕໍ່ຈາກນັ້ນໄປ ມີອີກ 6 ຫາ 7 ປ້ອມປາ ການ ຈົນຮອດປາກຫ້ວຍຂາວ, ແຕ່ລະປ້ອມໄກກັນ ປະມານ 300 ແມັດ. ຕາມກົມມໍລະດົກ ຢືນ ຢັນວ່າ: ກຳແພງຊັ້ນໃນນັ້ນໄດ້ສ້າງກ່ອນກຳແພງຊັ້ນນອກແນ່ນອນ, ແຕ່ສ້າງເວລາໃດບໍ່ທັນມີຫຼັກ ຖານຢັ້ງຢືນ. ຕາມຄຳເຫັນຂອງນັກປະຫວັດສາດຫລາຍຄົນວ່າ: ແມ່ນເຈົ້າໄຊເຊດຖາເປັນຜູ້ເລີ່ມ ສ້າງແຕ່ບໍ່ທັນສຳເລັດ ເພາະພະອົງເປັນຫ່ວງນຳຊະຕາກຳຂອງບ້ານເມືອງ ທີ່ຖືກພະມ້າ ເຂົ້າມາ ຄຸກຄາມເລື້ອຍ, ຈຶ່ງໄດ້ຍ້າຍເມືອງເອກມາຢູ່ນະຄອນວຽງຈັນ. ອາດຈະແມ່ນບິດຮຽມຂອງເພິ່ນ ເອງໃນເວລາປົກຄອງຢູ່ ນະຄອນຊຽງໃໝ່ ທີ່ໄດ້ຖືກພະມ້າ ມາຕີຫລາຍຄັ້ງ. (ຄວາມຈິງເປັນ ແນວໃດແທ້ຂໍຝາກໄວ້ໃຫ້ລຸ້ນຫລັງສຶກສາຕໍ່).

ການສ້າງໃນຄັ້ງນັ້ນບໍ່ທັນສຳເລັດ ຄົງແມ່ນເຈົ້າແຜ່ນດິນອົງອື່ນຕໍ່ມາສືບຕໍ່ກໍ່ສ້າງເຊັ່ນ: ເຈົ້າ ວໍລະວົງສາທຳມາທິລາດ, ເຈົ້າ ໜໍ່ເມືອງ ແລະ ພະອົງອື່ນໆ. ຈົນເຖິງສະຕະວັດທີ 17 ຈຶ່ງສຳເລັດ ການສັນນິຖານ ນີ້ອາດຈະຖືກກັບຄວາມຈິງ, ເພາະວ່າ ທ່ານ ວັນ ວູດສະໂຕບ ກໍໄດ້ຢັ້ງຢືນ ໃນປີ 1641 ແລະ ເວລາຝັ່ງ ເຂົ້າມາກໍໄດ້ຖ່າຍຮູບໄວ້ໃຫ້ໄດ້ເຫັນ, ອີກປະການໜຶ່ງ ທ່ານ ເລີເປຼເວກ ກໍ ໄດ້ແຕ້ມໃສ່ແຜນທີ່ ປີ 1895.

ການກໍ່ສ້າງຕໍ່ຕື່ມໃສ່ ກຳແພງຊັ້ນໃນ ໄປທິດຕາເວັນອອກ ເປັນວົງລົງມາຈອດໃສ່ແມ່ນ້ຳ ຂອງນັ້ນ ອາດຈະແມ່ນໃນໄລຍະ ເຈົ້າ ວໍລະວົງໂສ (ນ້ອງຊາຍ ເຈົ້າ ໄຊເຊດຖາ) ທີ່ຖືກພະມ້າ ຈັບໄປເປັນຕົວປະກັນຢູ່ ຊຽງໃໝ່ ແລະ ຊຳນານໃນວິຊາປັ້ນດິນເຜົາ. ພາຍຫລັງທີ່ ເຈົ້າ ໄຊເຊດ ຖາ ສິ້ນພະຊົນແລ້ວ, ບູເລັ່ງນອງ ແມ່ທັບໃຫຍ່ຂອງພະມ້າ ກໍສວຍໂອກາດມາຕີ ນະຄອນວຽງຈັນ ແລ້ວ ກໍເອົາເຈົ້າ ວໍລະວົງໂສ ມາປົກຄອງ, ຈຶ່ງເປັນໂອກາດໃຫ້ເພິ່ນນຳໃຊ້ວິຊານີ້ ເພື່ອສ້າງເຂດນີ້ ໃຫ້ເປັນເຂດຫັດຖະກຳດິນເຜົາ. ຕາມການຄົ້ນພົບໃນພື້ນດິນແຫ່ງນີ້, ນັກບູຮານວິທະຍາໄດ້ຄົ້ນ ເຫັນ ເຕົາເຜົາ 20 ກວ່າບ່ອນ ແລະ ຊິ້ນສ່ວນດິນເຜົາ ຢ່າງຫລວງຫລາຍ ໃນໂຄງການຂຸດຄົ້ນ ໃນປີ 1989. ຈຶ່ງສັນນິຖານວ່າ ແມ່ນເຂດຫັດຖະກຳ ດິນເຜົາ ເພື່ອປ້ອງກັນນ້ຳຖ້ວມ ຈຶ່ງໄດ້ຖົມ ເປັນຄັນຄູໄວ້. ການສັນນິຖານທີ່ 2 ແມ່ນ ພະໜໍ່ເມືອງ ລູກຊາຍ ເຈົ້າ ໄຊເຊດຖາ ຢາກຂະຫຍາຍ ເມືອງລົງມາຕື່ມ ໃນເຂດນີ້ກໍເລີຍສ້າງພື້ນຖານໄວ້ ເພື່ອຈະກໍ່ກຳແພງຕາມຫລັງ ແຕ່ບໍ່ທັນສຳເລັດ ເພາະຄອງເມືອງ ແຕ່ 5 ປີ ເທົ່ານັ້ນ, ຄັນຄູຕໍ່ຕື່ມນີ້ ບໍ່ປະກົດເຫັນມີດິນຈີ່ແຕ່ປະການໃດ, ມີລວງ ຍາວປະມານ 3 ກິໂລແມັດ ເທົ່ານັ້ນ ຊຶ່ງເລີ່ມຈາກ 3 ແຍກ ຄູວຽງ ໄປຕາມທາງໂສກປ່າຫລວງ ຕໍ່ ໃສ່ວັດສີອຳພອນ, ວັດນາກ ແລ້ວລ້ຽວລົງໃສ່ແຄມຂອງ ເຂດທ່າເຮືອຫລັກ 4. ຄັນຄູນີ້ ສ້າງເວລາ ໃດແທ້ ບໍ່ມີຫລັກຖານຢັ້ງຢືນ ແຕ່ບໍ່ຄ່ອຍມີຄວາມສຳຄັນທາງຍຸດທະສາດປານໃດ

ສິ່ງກໍ່ສ້າງທີ່ຄົ້ນພົບ ເວລາບູລະນະຖະໜົນ ເຊດຖາທິລາດ ແລະ ສາມແສນໄທໃນປີ 2006




ຮາກຖານກຳແພງເມືອງຊັ້ນໃນ (4ແຍກຫລັງວັດອິນແປງ)



ກຳແພງຣາຊະວັງເກົ່າ (ໜ້າ ກຊ ວັດທະນະທຳ)



ພື້ນປະຕູເຂົ້າ ວັດອິນແປງ ສະໄໝເກົ່າ



ກຸ່ມຫີນ ໃບເສມາ ທີ່ຄົ້ນພົບທີ່ ບ້ານ ເພຍວັດ



ພື້ນກຳແພງເກົ່າວັດອີ່ງຕື້



ຖານຂອງສີມວັດຍອດແກ້ວ (ຫໍພັກແພດສາດ)


+ ກຳແພງເມືອງ ຊັ້ນນອກ.

ຕາມຮູບຖ່າຍທາງອາກາດ SGI ຂອງຝຼ່ງ ປີ 1952 ແລະ ຂອງ AMS 20/01/1958 ໄດ້ ເຫັນຢ່າງຊັດເຈນ ຮ່ອງຮອຍຂອງກຳແພງຊັ້ນນອກ ຍາວປະມານ 14,300 ແມັດ ຊຶ່ງເລີ່ມຈາກ ບ້ານ ຫົວຄູສຸດ (ບ້ານ ສະຫວ່າງ) ໄປຕາມແຄມຮ່ອງແຊງເບື້ອງໃນ (ຫລັງໂຮງງານປະລາສະ ຕິກ) ຕາມແຄມບຶງແຄມນາ ຜ່ານບ້ານ ໂພນຕ້ອງ ລຽບຕາມຮ່ອງແຊງ ຫລັງໂພນເຕັງ ລັດໃສ່ບຶງ ທາດຫລວງ ໄປເບື້ອງໃນຖະໜົນກຳແພງເມືອງ ຈາກນັ້ນ ຖືກຖະໜົນນີ້ກວມໃສ່ແລ້ວມາແຍກ ກັນຢູ່ ວັດໂພນທັນເໜືອ ມາເບື້ອງໃນຈົນມາເຖິງໂຮງງານສັງກະສີ ຈຶ່ງຖືກຖະໜົນກຳແພງເມືອງ ກວມເອົາອີກປະມານ 2 ກິໂລແມັດ ຈົນຮອດທາງໂຄ້ງດອນກອຍ ຈຶ່ງແຍກອອກຈາກກັນອີກໄປ ຕາມແຄມບຶງ ລົງຕ່ໃສ່ ບ້ານ ໜອງໄຮ ແລ້ວກັບມາຕັດກັບຖະໜົນນີ້ອີກ, ກ່ອນຈະລົງໃສ່ແມ່ນ້ຳ ຂອງ ທີ່ບ້ານ ທ່ານາ ເມືອງ ຫາດຊາຍຟອງ.(ເບິ່ງຄືນຮູບພາບທີ 1).

ສ່ວນ ກ້ຳຕາເວັນຕົກ ແມ່ນບ່ຈອດເຖິງແຄມຂອງ ຊ້ຳອາດເຮັດບ່ທັນແລ້ວ. ບ່ປະກົດເຫັນ ຮ່ອງຮອຍຂອງກຳແພງຊັ້ນນອກ ໃນເບື້ອງຝັ່ງຂວາຂອງແມ່ນ້ຳຂອງເລີຍ.

ລັກສະນະຂອງ ກຳແພງຊັ້ນນອກ ແມ່ນກ່ໍສ້າງໄປຕາມທ້ວຍຮ່ອງຄອງບຶງ ອັນເປັນອຸປະ ສັກແບບທຳມະຊາດຕ້ານສັດຕູ, ເປັນການກ່ໍດ້ວຍດິນຈີ່ກ້ອນໃຫຍ່ (5x13.5x22.5) ໂບກດ້ວຍ ດິນໜຽວທຳມະດາແບບກຳແພງຊັ້ນໃນ ສູງປະມານ 5 ແມັດ, ກ້ວ້າງ 1,5 ແມັດ ແລ້ວຂຸດດິນມາ ຖົມໃສ່ ດັ່ງຮູບແຕ້ມລຸ່ມນີ້ (ຮູບພາບທີ 8). ຮູບພາບມັນບ່ຕ່າງກັນຫລາຍ ລະຫວ່າງ ສ້າງໃໝ່ ແລະ ດຽວນີ້ ເພາະການເວລາຜ່ານໄປຫລາຍສະຕະວັດ, ອີກປະການໜຶ່ງກ່ໍກຳແພງ ບ່ໃສ່ປະ ທາຍກໍເຮັດໃຫ້ມັນເພພັງໄວ. ກຳແພງຊັ້ນນອກນີ້ບ່ມີໃບເສມາ ແລະ ປ້ອມປະການ, ບ່ເຫັນຮ່ອງ ຮອຍຂອງປະຕູເມືອງ, ມັນໄດ້ອ້ອມເອົາເຂດໄຮ່ນາຮົ້ວສວນ ຂອງປະຊາຊົນ ອັນເປັນແຫລ່ງສະ ບຽງອາຫານໃຫ້ແກ່ກອງທະຫານ ແລະ ປະຊາຊົນໃນເມືອງວຽງຈັນອີກດ້ວຍ. ກຳແພງເມືອງຊັ້ນ ນອກ ສ້າງເວລາໃດບ່ມີຜູ້ຂຽນໄວ້, ນັກບູຮານວິທະຍາ ສັນນິຖານວ່າ ສ້າງລະຫວ່າງສະຕະວັດທີ 17 ຫາ19.


ໃນເວລາປົກຄອງອານາຈັກລ້ານຊ້າງ ພຽງແຕ່ 22 ປີ, ເຈົ້າ ໄຊເຊດຖາ ມີພາລະກິດໜັກ ທັ້ງສ້າງກອງທັບໃຫ້ເຂັ້ມແຂງ ເພື່ອປ້ອງກັນປະເທດ, ທັ້ງສ້າງວັດວາອາຮາມຢ່າງຫລວງຫລາຍ, ທັ້ງນຳພາປະຊາຊົນຜະລິດຜົນ, ທັ້ງສ້າງກຳແພງເມືອງຊັ້ນໃນ, ທັ້ງຍົກໄປຕີພວກກະບົດແລະ ສັດ ຕູພາຍນອກ ແລະ ອື່ນໆ ຄົງຈະບ່ໄດ້ສ້າງກຳແພງຊັ້ນນອກ ອັນຍາວຢຽດເຊັ່ນນີ້. ຄົງຈະແມ່ນ ເຈົ້າແຜ່ນດິນຜູ້ສືບທອດ ໃນຊ່ວງເວລາຕ່ໍມາສ້າງ ຈົນມາເຖິງສະໄໝເຈົ້າອະນຸວົງ. ເຖິງແນວໃດກໍ ຕາມ ຂ້າພະເຈົ້າ ບ່ມີສ່ວນຕັດສິນໃນບັນຫານີ້, ພຽງແຕ່ຢືນຢັນວ່າ ກຳແພງເມືອງຊັ້ນນອກ ແລະ ຊັ້ນໃນນີ້ ໄດ້ມີມາໃນສະໄໝອານາຈັກລ້ານຊ້າງແລ້ວ.




(ເມື່ອກ່ອນ) (ດຽວນີ້)


ຮູບກຳແພງຊັ້ນນອກ

ມີຮູບທີ່ພິດສະດາມ ແລະ ໜ້າອັດສະຈັນອັນໜຶ່ງ ແມ່ນຮູບໜ້າດິນທີ່ເປັນ 4 ຫລ່ຽມຍາວ ຕໍ່ໜ້າພະທາດຫລວງລົງມາ, ຢູ່ນີ້ເຫັນແຈ້ງໃນຮູບຖ່າຍທາງອາກາດຂອງຝັ່ງ SGI ປີ 1952 ແລະ ຂອງອາເມລິກາ (US Air Force) ປີ 1958 ແລະ ຍັງເຫັນຂ້າງໜຶ່ງຢູ່ໃນຮູບຜ່ານດາວທຽມ ດຽວນີ້. ຮູບ 4 ຫລ່ຽມດັ່ງກ່າວ ມີຂະໜາດ 1300 x 1850 ແມັດ ເປັນ 4 ແຈສາກ, ມຸມ 1 ຢູ່ປະຕູອ່າງນ້ຳປະປາໂພນເຄັ່ງ, ມຸມ 2 ຢູ່ 3 ແຍກສີ່ສ່ຽງອອມ (Transpack) ຊຶ່ງມີຂ້າງທີ່ຂະໜານກັບເດີ່ນພະທາດຫລວງ, ມຸມ 3 ຢູ່ກຳແພງ ວັດທາດຝຸ່ນ ຕໍ່ໜ້າກະຊວງພະລັງງານ ແລະ ມຸມທີ 4 ຢູ່ສາງເກົ່າ ບ້ານ ທົ່ງສ້າງນາງ. ຫລາຍຄົນເຂົ້າໃຈວ່າແມ່ນກຳແພງເມືອງຊັ້ນກາງ. ຄວາມຈິງແລ້ວ ແມ່ນເອີ້ນຜິດ ເພາະວ່າດິນທີ່ຄູນຂຶ້ນນີ້ ບໍ່ມີດິນຈີ່ ກໍບໍ່ເປັນຮູບຮ່າງກຳແພງເລີຍ. ອີກປະການໜຶ່ງ, ກໍບໍ່ໄດ້ມີລັກສະນະປ້ອງກັນເມືອງວຽງຈັນແຕ່ປະການໃດທັງນັ້ນ. ນັກບູຮານວິທະຍາຫລາຍທ່ານ ໃຜກໍສັນນິຖານວ່າ ສິ່ງກໍ່ສ້າງນີ້ ອາດຈະສ້າງຂຶ້ນໃນສະໄໝຂະເໝນ ມີອຳນາດໃນເມືອງ ຫາດຊາຍຟອງ, ເພື່ອຈຸດປະສົງຫຍັງ? ຫາຄຳຕອບຍາກ ເພາະບໍ່ມີຫລັກຖານຫຍັງຢັ້ງຢືນເລີຍ ແລະ ໃນເນື້ອທີ່ແຫ່ງນີ້ກໍບໍ່ໄດ້ຄົ້ນພົບຫຍັງ. ສະນັ້ນ ຈຶ່ງບໍ່ສາມາດສະຫລຸບໄດ້ ແລະ ບໍ່ອາດຈະເວົ້າເປັນກຳແພງເມືອງໄດ້ອີກຕໍ່ໄປ.



ຮູບຄັນຄູສີ່ຫລ່ຽມພິດສະດານ






ທີ່ບ້ານ ໂພນຕ້ອງ (ຫລັງໂຮງງານປະລາຊະຕິກ



ທີ່ບ້ານ ດອນກອຍ (ຫລັງທາງໂຄ້ງ)




ທີ່ບ້ານ ໜອງໄຮ

3. ຄວາມຈະເລີນຮຸ່ງເຮືອງດ້ານ ສາສະໜາ ແລະ ຄວາມເຊື່ອຖື.

- ວັດວາອາຮາມ.

ກ່ອນຈະຕັ້ງເປັນນະຄອນວຽງຈັນ, ຫຼື ກຸງສີສັດຕະນາຄະນະຫຸດນັ້ນ, ຄືດັ່ງໄດ້ເວົ້າມາແດ່ແລ້ວ, ແມ່ນຍ້ອນປະຊາຊົນ ຊາວວຽງຈັນ ໄດ້ເຊື່ອຖືສາສະໜາພຸດ ແລະ ພາມມາກ່ອນແລ້ວ, ໝາຍຄວາມວ່າ ໄດ້ມີວັດວາອາຮາມມາຫລາຍແລ້ວ, ແຕ່ອາດຈະຕັ້ງຢູ່ກະແຈກກະຈາຍ ຕາມບ້ານນ້ອຍໃຫຍ່ ຊຶ່ງບໍ່ໄດ້ສັນລະສູດເຫັນເທື່ອວ່າມີເທົ່າໃດ ແລະ ຢູ່ແຫ່ງໃດແດ່. ຕາມບົດຂຽນຂອງຄຸນພໍ່ມາຣີນີ ແລະ ເລີຣີອາ ວ່າມີປະມານ 80 ຫາ 120 ວັດ. ຈຳນວນຫລວງຫລາຍຄືແນວນີ້ ບໍ່ອາດຈະຢູ່ໃນກຳແພງເມືອງຊັ້ນໃນ ໄດ້ຄົງຈະນັບວັດທັງໝົດທັງສອງຝັ່ງຂອງໃນຂົງເຂດ ວຽງຈັນ ນີ້. ວັດສີສະເກດ (ເມື່ອກ່ອນຊື່ວ່າ ວັດແສນ ສ້າງປີ 1521) ກ່ອນເຈົ້າໂພທິສະລາດ ລົງມາວຽງຈັນ; ເພາະສ້າງຕ່າງເພິ່ນຄື: ປັ່ນໜ້າໄປຫານ້ຳຂອງ ແທນທີ່ຈະຂະໜານໄປຕາມແລວນ້ຳຂອງຄືວັດອື່ນ. ເປັນທີ່ສັງເກດໄດ້ຈະແຈ້ງວ່າວັດຢູ່ວຽງຈັນນີ້ ແມ່ນສ້າງລຽບໄປຕາມແຄມນ້ຳຂອງ ປັ່ນສີໜ້າໄປທາງທິດຕາເວັນອອກ (ຫລື ວ່າທາງໃຕ້ແມ່ນ້ຳຂອງ ຊຶ່ງກົງກັນຂ້າມກັບວັດຢູ່ ຫລວງພະບາງ ທີ່ປັ່ນສີໜ້າໄປທາງທິດເໜືອຂອງແມ່ນ້ຳຂອງ) ຍົກເວັ້ນຫໍພະແກ້ວ ທີ່ມີສີໜ້າໄປທາງທິດຕາເວັນຕົກ ສ່ຽງເໜືອ ຫລື ທິດເໜືອ ຂອງແມ່ນ້ຳຂອງ ຄືກັນກັບຫລວງພະບາງ.

ຕາມການຄົ້ນຄວ້າຂອງທ່ານ ມີແຊນ ໂລຣິຢາ (M. Lorrilard) ໃນເວລາບູລະນະຖະໜົນສາມແສນໄທ,ຖະໜົນເຊດຖາທິລາດ ແລະ ອີງໃສ່ຫີນສິລາຈາລຶກ ທີ່ມີຢູ່ທາດຫລວງ, ຫໍພະແກ້ວ ແລະ ແຜນທີ່ຂອງ H.Parmentier ປີ 1912 ຈຶ່ງພໍສະຫລຸບໄດ້ວ່າ: ວັດເກົ່າແກ່ທີ່ມີໃນສະໄໝ ນະຄອນວຽງຈັນ ຮຸ່ງເຮືອງນີ້ (ເບື້ອງກ້ຳຊ້າຍແມ່ນ້ຳຂອງ) ມີທັງ 4 ແຖວ ລຽນຍາວໄປຕາມແລວແມ່ນ້ຳຂອງ ຈາກຕາເວັນຕົກ ໄປສູ່ຕາເວັນອອກ ຫລື ເວົ້າໄດ້ວ່າ ຈາກເໜືອນ້ຳຂອງ ລົງໄປໃຕ້ ອາດມີຄຳໝາຍວ່າ ຕ້ອງຂະຫຍາຍສາສະໜາພຸດລົງໄປພາກໃຕ້ ໃຫ້ຫລາຍຂຶ້ນ. ສ່ວນປັ່ນສີໜ້າໄປທາງທິດຕາເວັນອອກນັ້ນ ແມ່ນຖືກຕ້ອງກັບຮີດຄອງຄົນລາວແລ້ວ, ລະອຽດແຕ່ລະແຖວມີດັ່ງນີ້:



ແຜນທີ່ຕັ້ງຂອງວັດ ໃນວຽງຈັນ ຂອງ H.Parmentier 1912

ແຖວທີ 1:

ນັບແຕ່ຕາເວັນຕົກ ໄປຫາຕາເວັນອອກ ລຽບຕາມແຄມຂອງລົງໄປມີ: ວັດຈັນ, ວັດຊຽງຍືນ ວັດກາງ (ພັງໝົດ ແມ່ນບ່ອນໂຮງແຮມລ້ານຊ້າງດຽວນີ້), ວັດສີສຸມັງ (ພັງໝົດ), ວັດຫາດສີ (ພັງໝົດ), ວັດເພຍວັດ, ວັດສີພົມ (ພັງໝົດ ບ່ອນກົມການຢາດຽວນີ້), ວັດຫາດນ້ອຍ (ພັງໝົດ), ວັດພິດານສາມ (ພັງໝົດ ຢູ່ບ່ອນໂຮງຮຽນຫາດຂາວ ດຽວນີ້), ວັດຫາດຂາວ, ວັດສາຄວນ ຫລື ສະຄວງ (ພັງໝົດ), ວັດຄຳລຽນ ຫລື ຂາມຫລ່ຽມ (ພັງໝົດ) ແລະ ອີກຈຳນວນໜຶ່ງ ບໍ່ທັນຄົ້ນພົບ. (ສັນນິຖານວ່າ: ວັດເພຍວັດ ແລະ ວັດສີພົມ ຄົງແມ່ນຊາວພວນສ້າງ ເພາະມີຊື່ວັດ ດັ່ງກ່າວ ຢູ່ເມືອງ ຄູນ ແຂວງ ຊຽງຂວາງ ມາແຕ່ກ່ອນແລ້ວ).

ແຖວທີ 2:

ມີ ວັດອິນແປງ, ວັດສີວັນນະພູມ (ພັງໝົດ), ວັດອົງຕື້, ວັດມີໄຊ, ຫໍພະແກ້ວ [9], ວັດເກົ້າຍອດ, ວັດມະໂນ (ພັງໝົດ), ວັດນາໂຮມ (ພັງໝົດ), ວັດສີເມືອງ ແລະ ອີກຈຳນວນໜຶ່ງທີ່ບໍ່ໄດ້ຄົ້ນພົບ. ວັດຈຳນວນນີ້ແມ່ນຢາຍໄປຕາມແລວຖະໜົນ ເຊດຖາທິລາດ ຕໍ່ໃສ່ຖະໜົນທ່າເດື່ອ ພິເສດ ຫໍພະແກ້ວ ແມ່ນຢູ່ໃນພະຣາຊະວັງ, ເພາະ ພະແກ້ວມໍລະກົດ ແມ່ນພະທີ່ເປັນມິ່ງຂ້ວນຂອງຊາວລາວ ແລະ ເຈົ້າແຜ່ນດິນຕ້ອງໄດ້ໄປໄຫວ້ທຸກໆວັນສິນ.

ແຖວທີ 3:

ລະຫວ່າງ ຖະໜົນເຊດຖາທິລາດ ແລະ ຖະໜົນສາມແສນໄທ ມີວັດພະບາງ (ພັງໝົດ), ວັດຫາຍໂສກ, ວັດສີບຸນຍືນ (ພັງໝົດ), ວັດຜາຂາວ (ພັງໝົດ ຢູ່ບໍ່ນ້ຳພຸດຽວນີ້), ວັດສີສະເກດ. ວັດຫໍໄຕຄຳ (ພັງໝົດ), ວັດຍອດແກ້ວ (ພັງໝົດ ຢູ່ຫໍພັກແພດສາດ), ວັດພະໂພ, ວັດພະໄຊ, ວັດສະຄີ (ພັງໝົດ ແມ່ນບ່ອນວັດບຶງຂະຫຍອງດຽວນີ້), ວັດພະແພງ (ພັງໝົດ) ແລະ ອີກຈຳນວນໜຶ່ງທີ່ບໍ່ທັນຄົ້ນພົບ.

ແຖວທີ 4:

ບໍ່ເປັນແຖວປານໃດ ເພາະປຸກລຽບຕາມທົ່ງນາ: ວັດສີສຸມົນ (ອາດຈະຢູ່ບ່ອນໂຮງແຮມລາວພຼາຊາ ດຽວນີ້), ວັດພົມອາຂັນ, ວັດຮວງເຜິ້ງ (ບ່ອນອ້ອງການໄປສະນີ), ວັດປູ່ຍ່ອນ (ຂ້າງສະໜາມກິລາ), ວັດສີມ່ວງຄຸນ (ຂ້າງນ້ຳພຸກ້ຳເໜືອ), ວັດໂພນາຣາມ (ສະຖານທີ່ທູດອາເມລິກາ), ທັງໝົດລ້ອມແຕ່ເພພັງໝົດ. ຈຳນວນວັດ ໃນກຳແພງເມືອງນີ້ອາດມີ ຮອດ 50 ວັດ (ກວມເນື້ອທີ່ 18% ຂອງເຫດສະບານ). ວັດທັງໝົດທີ່ມີຢູ່ໃນກຳແພງເມືອງດຽວນີ້, ນອກຈາກວັດສີສະເກດແລ້ວ ແມ່ນຊາວວຽງຈັນ ໄດ້ພ້ອມກັນກໍ່ສ້າງ ແລະ ບູລະນະຄືນໃໝ່ ໃນຕົ້ນສະຕະວັດທີ 20 ນີ້ເອງ ສ່ວນວັດທີ່ຂຽນວ່າ **ພັງໝົດ** ໄປແລ້ວນັ້ນ ແມ່ນບໍ່ໄດ້ປະຕິສັງຂອນຄືນ.


ຮູບແຕ້ມໃນຝາວັດສີສະເກດ:




ວັດສີສະເກດ, ວັດດຽວທີ່ລອດຈາກການຈູດເຜົາຂອງສະຫຍາມ ໃນປີ 1822
(ສິລະປະກຳສະໄໝເຈົ້າ ອະນຸວົງ)



ຮູບສະແດງການເຄື່ອນໄຫວຂອງລາສະດອນ ໃນນະຄອນຫລວງວຽງຈັນ ສະໄໝເຈົ້າ ອະນຸວົງ



ຫໍພະແກ້ວແບບເດີມທີ່ ເຈ້ົາ ໂພທິສະລາດສ້ົາງໃນຊຸມປີ (1535 - 1550) ແລ້ວເຈ້ົາ ອະນຸວົງ ໄດ້ມາບູລະນະ ຄືນໃນຊຸມ ປີ (1808 - 1818).



ສ່ວນວັດ ທີ່ລອດຈາກການທຳລາຍຂອງສັກດິນາສະຫຍາມນີ້ ມີພຽງວັດດຽວຄື: ວັດສີສະເກດ. ວັດດັ່ງກ່າວນີ້ ຍັງຮັກສາໄວ້ສິລະປະກຳ, ສະຖາປັດຕະຍະກຳອັນງົດງາມ ແລະ ຮັ່ງມີແຫ່ງຍຸກອະລິຍະທຳ ສະໄໝອານາຈັກລາວລ້ານຊ້າງ ມາເຖິງປະຈຸບັນນີ້.

ສະຫລຸບແລ້ວ, ວັດທີ່ເກົ່າແກ່ກວ່າໝູ່ໃນນະຄອນວຽງຈັນ ຄົງແມ່ນວັດສີສະເກດ (ວັດ ແສນ), ວັດສີເມືອງ, ວັດຈັນ, ວັດກາງ, ວັດເພຍວັດ, ວັດອິນແປງ, ວັດອົງຕື້, ວັດພະໂພທິສະ ຣາດ. ໃນເວລາແຫ່ຜາສາດເຜິ້ງໄປນະມັດສະການພະທາດຫລວງທຸກໆປີ ເພິ່ນຈະຕ້ອງມາເລີ່ມຕົ້ນຈາກວັດສີເມືອງ ໄປພະທາດຫລວງ ສຸດທ້າຍແຫ່ກັບມາວັດອົງຕື້ ຈຶ່ງສ້ຽງສຸດ, ເພາະວ່າແມ່ນວັດທີ່ເຈົ້າໄຊເຊດຖາ ເປັນຜູ້ສ້າງ (ວັດກາງແມ່ນວັດທີ່ພະສັງຄະລາດ ປະທັບຢູ່ : ເຈົ້າຊີວິດສ້ຽ).

- ເຄຫາສະຖານ.

ທ່ານ ກາກນີເອ (F. Garnier) ໄດ້ບັນທຶກ ໃນປີ 1873 ໄວ້ວ່າ: " ເຮືອຊານທ້ຽຫລາຍສ້າງຂະໜານກັບແຄມຂອງ, ຕາມຖະໜົນຍາວລົງມາ ແລະ ຕັດສາກດ້ວຍຖະໜົນຫລາຍສາຍທີ່ຕ້ຽງສາກກັບແມ່ນ້ຳຂອງ". ເນື້ອທີ່ 82% ຂອງເທດສະບານ ແມ່ນກວມເອົາຣາຊະວັງ, ຫໍໂຮງທີ່ທຳງານຂອງຊຸນນາງ, ຂ້າຣາຊະການ ແລະ ທີ່ຢູ່ອາໄສຂອງປະຊາກອນ ເວົ້າຫຍໍ້ກໍຄືວ່າ 20% ຂອງເນື້ອທີ່ໃນເທດສະບານ ແມ່ນເປັນຂອງຣາຊະການ ແລະ ອີກ 62% ເປັນທີ່ຢູ່ອາໄສຂອງພົນລະເຮືອນ ແລະ ຖະໜົນຫົນທາງ.

- ພະຣາຊະວັງ.

ທີ່ປະທັບຂອງເຈົ້າແຜ່ນດິນ ຊຶ່ງມີຫໍຜາສາດຣາຊະວັງ ແລະ ຫໍໂຮງອັນງົດງາມນັ້ນ ແມ່ນມຸ່ນທະລາຍໄປໝົດ ບໍ່ເຫັນຮອດເສົາຊີ້ຟ້າ ຕາມນັກປະຫວັດສາດ ແລະ ບູຮານວິທະຍາຂອງຝ່ຽ ໃຜໆກໍຢືນຢັນວ່າ ແມ່ນເຂດຫໍຄຳໃນປະຈຸບັນ ທາງທິດເໜືອແມ່ນກວມເອົາສ່ວນໜຶ່ງຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ທິດຕາເວັນອອກ ມີເຂດແດນຮອດວັດສີສະເກດ ແລະ ກວມເອົາຫໍພະແກ້ວ ຮອດຖະໜົນມະໂຫສົດ, ທາງທິດໃຕ້ ແມ່ນຕິດກັບແມ່ນ້ຳຂອງ ຂັ້ນພຽງຖະໜົນເທົ່ານັ້ນ, ທິດຕາເວັນຕົກ ຕິດກັບແດນເຂດວັດກາງ ແລະ ໂຮງແຮມລ້ານຊ້າງດຽວນີ້. ລະອຽດແນວໃດນັ້ນ ມີຄວາມຈຳເປັນສືບຕໍ່ຂຸດຄົ້ນ ເພື່ອພິສູດໃຫ້ເຫັນຕື່ມ.

ຕາມປຶ້ມ ປະຫວັດສາດ ສິລະປະ ແລະ ສະຖາປັດຕະຍະກຳສິນລາວ ເຫລັ້ມ I ຂອງທ່ານ ບຸນເຮັ່ງ ບົວສີແສງປະເສີດ ເວົ້າວ່າ: ການສ້າງວັດ ໃນນະຄອນຫລວງວຽງຈັນ ສະໄໝອານາຈັກລ້ານຊ້າງນັ້ນ ແມ່ນສືບມືຂອງ 2 ສະກຸນຊ່າງຄື: ສະກຸນຊ່າງວຽງຈັນ ແລະ ສະກຸນຊ່າງ ຫລວງພະບາງ ເວົ້າລວມ. ໄດ້ສັງເກດເຫັນວ່າ: ສະກຸນຊ່າງ ວຽງຈັນ ມີເສົາວັດເປັນຮູບ 4 ຫລ່ຽມ ນາກ ຫລື ໂງ່ມີຫອນ 1 - 2 ແງ່ເທົ່ານັ້ນ, ສ່ວນສະກຸນຊ່າງ ຫລວງພະບາງ ເສົາ ວັດຈະກົມ, ຫອນນາກມີຫຼາຍກວ່າ 2 ແງ່ລຽນຕິດກັນ, ສ່ວນໂງ່ມີຫອນແງ່ດຽວ.

ຜ່ານການບູລະນະຖະໜົນ ເຊດຖາທິລາດ ເພີ່ນໄດ້ຂຸດພົບກຳແພງ 2 ຊັ້ນ ຕໍ່ໜ້າກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ, ອາດຈະແມ່ນກຳແພງສ້າງໃນສອງໄລຍະຕ່າງກັນຂອງຣາ ຊະວັງ. ໃນປີ 1900 ທ່ານ ຣາແກັດ A.Raquez ໄດ້ມາວຽງຈັນ ແລະ ໄດ້ບັນທຶກວ່າ: " ກຳແພງ ຣາຊະວັງ ຍາວໄປທິດເໜືອ ອີກ ຊຶ່ງບໍ່ສາມາດຂຸດຕໍ່ໄປໄດ້, ຈຶ່ງສັນນິຖານວ່າ: ແມ່ນກຳແພງຂອງ ຣາຊະວັງ ຊຶ່ງເປັນແບບດຽວກັບກຳແພງເມືອງຊັ້ນໃນ ແຕ່ຕ່ຳກວ່າ. ຣາຊະວັງແຫ່ງນີ້, ມີເນື້ອທີ່ 200 x 300 ແມັດ ຕິດກັບແຄມຂອງ ຂັ້ນພຽງແຕ່ທາງ, ມີປະຕູໂຂງໄຂໄປຫາຜາມໄຊ ຊຶ່ງເຈົ້າ ແຜ່ນດິນ ເຄີຍໄປນັ່ງຊົມບຸນຕ່າງໆ ໃນແມ່ນ້ຳຂອງ. ໃນພະຣາຊະວັງຍັງມີ: ກົກງິ້ວ, ກົກສັກ, ກົກ ຕານ, ກົກກ້ວຍຢູ່ . . . ຢູ່ເຂດ ເກົ້າລ້ຽວ ກໍມີສວນຂອງເຈົ້າແຜ່ນດິນ ".


ເສຍດາຍ ບໍ່ມີໃຜໄດ້ວາດຮູບຂອງຜາສາດຣາຊະວັງແຫ່ງນີ້, ແຕ່ກໍສັນນິຖານໄດ້ວ່າ: ຣາ ຊະວັງແຫ່ງນີ້ ຄົງຈະບໍ່ແຕກຕ່າງກັບຮູບແຕ້ມໃນຝາວັດເກົ່າທົ່ວໆໄປ, ຕ່າງແຕ່ວ່າຜູ້ແຕ້ມບໍ່ໄດ້ ວາດພາບສາມມິຕິໄວ້ຢ່າງຊັດເຈນ. ເມື່ອທຽບໃສ່ຄຳເລົ່າຂອງຄຸນພໍ່ ມາຣີນີ ແລະ ເລີຣີອາ ແລ້ວ ຄົງຈະເປັນເຮືອນຊັ້ນດຽວຍົກສູງ (ຫລື ສອງຊັ້ນ) ກໍ່ດ້ວຍດິນຈີ່, ມຸງດ້ວຍດິນຂໍ, ປະຕູປ່ອງຢ້ຽມ ເຮັດດ້ວຍໄມ້ຄວັດເປັນລາຍງົດງາມ ແລະ ຝອກດ້ວຍຄຳປົວ(ໃນເວລານັ້ນແມ່ນນິຍົມກັນຫຼາຍ) ສ່ວນພື້ນເຮືອນຊັ້ນລ່າງແມ່ນປູດ້ວຍດິນເຜົາ ຊັ້ນເທິງປູດ້ວຍໄມ້ແປ້ນ, ໂຄງຫລັງຄາອາດຈະເປັນ ຮູບກາກະບາດ ເປັນ 3 ຊັ້ນ ແລະ ຕໍ່ຂຶ້ນດ້ວຍຈອມຄຳ, ສ່ວນສີໜ້າຈະປັ້ນໄປທິດເໜືອ ຕ່າງກັບ ເຮືອນຂອງປະຊາຊົນທົ່ວໄປ, ຈະມີຮູບຄວັດລາຍແບບຫລວງພະບາງ ຫລື ແບບລ້ານນາ. ອ້ອມ ຂ້າງທີ່ປະທັບຂອງເຈົ້າແຜ່ນດິນຈະມີ ຫໍໂຮງ ຂອງມະເຫສີ ແລະ ພວກຮັບໃຊ້, ຈະມີໂຮງການ ຂອງຣາຊະເລຂາ, ຄ້າຍທະຫານຮັກສາພະອົງ, ຈາກນັ້ນ ຈະມີຄອກມ້າ, ສວນດອກໄມ້ ແລະ ໜອງດອກບົວ. ລຽບກຳແພງເບື້ອງໃນເພີ່ນຈະປູກໄມ້ຈວງ, ໄມ້ຈັນ, ກົກໝາກ, ກົກພ້າວ, ກົກ ຕານ, ກົກຝາງແດງ, ກົກຈຳປາ, ກົກຄູນ ແລະ ໄມ້ຊະນິດອື່ນໆ ເພື່ອໃຫ້ດອກຕາມລະດູການ.

ປະຕູວັງແມ່ນເປັນປະຕູໂຂງ, ເມື່ອເຈົ້າແຜ່ນດິນສະເດັດໄປພະທາດຫລວງ ກໍອອກຈາກ ປະຕູວັງທາງດ້ານເໜືອ ຜ່ານຖະໜົນ ລະຫວ່າງ ວັດສີສະເກດ (ແລະ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ) ອອກໄປຕໍ່ໃສ່ຖະໜົນມະໂຫສົດ ອອກປະຕູເມືອງທີ່ 3 (ຕະຫລາດເຊົ້າ) ໄປຕາມຖະໜົນ ໜອງບອນ ເຂົ້າສູ່ ພະທາດຫລວງ, ຖະໜົນນີ້ຍັງເປັນແລວທາງເດີມຢູ່.

ພະຣາຊະວັງແຫ່ງນີ້ ໄດ້ຖືກສັກດິນາສະຫຍາມຈູດເຜົາຄັ້ງທີ 1 ປີ 1780 ແລ້ວເຈົ້າ ອະນຸ ວົງ ໄດ້ມາກໍ່ສ້າງຄືນ ໃນປີ 1808 ແລ້ວກໍຖືກສັກດິນາສະຫຍາມມາຈູດເຜົາຄັ້ງທີ 2 ໃນປີ 1828.


- ເຂດຂຸນນາງຜູ້ໃຫຍ່.(ຂ້າຣາຊະການຊັ້ນຜູ້ໃຫຍ່).

ເຂດຂຸນນາງຜູ້ໃຫຍ່ ອັນໝາຍເຖິງເຈົ້າພະຍາທັງຫລາຍ (ລັດຖະມົນຕຼີ ແລະ ທີ່ປຶກສາ ຂອງເຈົ້າແຜ່ນດິນ) ຕາມທຳມະດາ ຕ້ອງຢູ່ໃກ້ພະຣາຊະວັງທີ່ສຸດ. ຕາມການຄົ້ນພົບຂອງຊ່ຽວ ຊານຍີ່ປຸ່ນ ນາງ ນາໂຮ ຊິມາຊຶ ໃນປີ 2007 ແລະ ທ່ານ ມິແຊນ ໂລຣິຢາ (Michel Lorrillard) ວ່າ: ຢູ່ເຂດໃຕ້ວັດສີສະເກດ ຮອດທູດຝຣັ່ງ ຕ່ໍໃສ່ພະແນກໂຍທາດຽວນີ້ ແລະ ເຂດສຳນັກແນວ ລາວສ້າງຊາດ ຮອດມະຫາວິທະຍາໄລວິທະຍາສາດສຸຂະພາບນັ້ນ ເພິ່ນໄດ້ຄົ້ນພົບກະເບື້ອງດິນ ເຜົາຊັ້ນດີຈາກຕ່າງປະເທດ ເຊັ່ນ: ຂອງຈີນ ໃນສະໄໝຈັກກະພັດໝິງ ແລະ ຂອງຍີ່ປຸ່ນ ໃນສະ ໄໝ ຮິເຊັນ ເປັນຕົ້ນ. ຈຶ່ງສັນນິຖານວ່າ: ເຂດນີ້ຄົງຈະເປັນເຂດຂອງຜູ້ທີ່ມີເງື່ອນໄຂຊົມໃຊ້ສິ່ງດັ່ງ ກ່າວ ສະນັ້ນ ຄົງຈະແມ່ນເຂດຂຸນນາງຜູ້ໃຫຍ່ແນ່ນອນ ສ່ວນເຂດໂຮງໝໍມະໂຫສົດນັ້ນ ບ່ໍໄດ້ພົບ ຫຍັງ, ຖ້າສືບຕ່ໍຂຸດຄົ້ນກໍຈະເຫັນແຈ້ງ, ອາດເປັນສວນອຸທິຍານຂອງເຈົ້າແຜ່ນດິນກໍໄດ້. ເພາະວ່າ ຜູ້ອື່ນທີ່ບ່ໍກ່ຽວຂ້ອງກັບລາຊະການ ຄົງຈະບ່ໍມີສິດເຂົ້າມາປຸກສ້າງໃກ້ຫໍພະແກ້ວ ແລະ ພະຣາຊະ ວັງ ທີ່ເຈົ້າແຜ່ນດິນປະທັບຢູ່.



ຣາຊະວັງຫລວງ ອານາຈັກລາວລ້ານຊ້າງ
ສະໄໝເຈົ້າ ໄຊເຊດຖາທິລາດ

ການປຸກສ້າງ ໃນເຂດນີ້ ບ່ໍເຫັນສິ່ງກ່ໍສ້າງເກ່ົາ ຈຶ່ງສັນນິຖານວ່າ ເປັນສວນອາຍຸທະຍານ.



ຫໍໂຮງຂອງ ຂຸນນາງຜູ້ໃຫຍ່ (ຂ້າຣາຊະການຊັ້ນສູງ)

ສ່ວນວັງຂອງ **ເຈົ້າຣາຊະວົງ** ນັ້ນແມ່ນເຂດທູດຝຣັ່ງດຽວນີ້. (ເຈົ້າຣາຊະວົງ ແມ່ນບຸດຊາຍ ກົກ ແລະ ແມ່ທັບໃຫຍ່ຜູ້ເກັ່ງກ້າອາດຫານຂອງເຈົ້າອະນຸວົງ).

ລັກສະນະຂອງ ຫໍໂຮງ ຂຸນນາງຜູ້ໃຫຍ່ນັ້ນ ອາດຈະນ້ອຍ ຫລື ໃຫຍ່ ຂຶ້ນກັບຖານະທາງ ຣາຊະການ, ເວົ້າລວມ ແມ່ນເຮືອນເສົາຕັ້ງ ຫລື ເສົາຝັງ ໄມ້ເນື້ອແຂງ, ພື້ນແປ້ນ, ຝາປະທາຍ ຫລື ຝາແປ້ນ, ປະຕູປ່ອງຢ້ຽມ ເປັນໄມ້ຄວັດລວດລາຍ, ຫລັງຄາມຸງດິນຂໍ, ມີຫ້ອງຕະລ່ຽງສູງ, ມີ ເຊຍຮັບແຂກ ແລະ ຮັບປະຊາຊົນ, ມີຫ້ອງສ້ວມນອນ, ມີເຮືອນຄົວ, ວິດ ແລະ ຫ້ອງນ້ຳ, ມີເດີ່ນ ກ້ວ້າງແດ່, ມີເຮືອນນອນສຳລັບຂ້ອຍຂ້າ, ມີຄອກມ້າ, ເລົ້າເຂົ້າຄົກມອງຕ່າງໆ ປະຕູບ້ານມຸງດິນ ຂໍ, ມີຮົ້ວສານແຕະດ້ວຍໄມ້ໄຜ່ອ້ອມຢູ່. ເຮືອນຜູ້ໃຫຍ່ນີ້ ປຸກຂະໜານກັບແມ່ນ້ຳຂອງ ຢ່າງເປັນ ລະບຽບ ດັ່ງແບບນະຄອນ ຫລວງພະບາງ ຊຶ່ງເຈົ້າ ໄຊເຊດຖາ ນຳລົງມາພັດທະນາ.


- ເຂດການຄ້າ.

ຕາມການຄົ້ນພົບຂອງນາງ ຊິມິຊູ (Shimizu) ແລະ ນັກຄົ້ນຄວ້າອື່ນຫລາຍທ່ານທີ່ໄດ້ເຫັນວັດຖຸບູຮານ ໃນພື້ນຖະໜົນ ເຊດຖາທິລາດ ແຕ່ພະແນກໂຍທາລົງໄປຮອດທາດຂາວ ສ່ວນມາກຈະແມ່ນດິນເຜົາ ແລະ ວັດຖຸໃຊ້ສອຍຕ່າງໆ. ສະນັ້ນ, ເພິ່ນຈຶ່ງສັນນິຖານວ່າ ອາດເປັນເຂດການຄ້າ, ເພາະວ່າເຂດນີ້ໃກ້ ບ້ານ ພັນພ້າວ (ແຂວງ ໜອງຄາຍ) ຫລາຍ, ອາດມີຄົນຕ່າງປະເທດ ເຂົ້າມາຄ້າຂາຍກໍເປັນໄດ້. ເຂດນີ້ຄົງເປັນເຮືອນໄມ້ທຳມະດາ ແບບຫ້ອງແຖວຊັ້ນດຽວ ຊຶ່ງປຸກຂະໜານ ກັບແມ່ນ້ຳຂອງ ແລະ ມີອີກເຂດໜຶ່ງທີ່ເປັນຕະຫລາດເຊົ້າ ຂອງປະຊາຊົນ ແມ່ນ ຖະໜົນລຽບແຄມຂອງ ແຕ່ວັດຈັນເຖິງວັດກາງ ປະຊາຊົນທາງເໜືອວຽງຈັນ ໄດ້ລ່ອງເຮືອລົງມາຈອດຕາມ ທ່າວັດຈັນ ເພື່ອຄ້າຂາຍເຄື່ອງກະສິກຳໃນທຸກເຊົ້າໄດ້ສະດວກດີ.

- ເຂດປະຊາຊົນ ອາໄສຢູ່.

ເມື່ອສັງເກດເບິ່ງຕາມແຜນທີ່ເກົ່າໆແລ້ວ ເຫັນໄດ້ວ່າ ເພິ່ນກໍ່ປຸກຂະໜານກັບ ແມ່ນ້ຳຂອງ ຄືກັບ ຫລວງພະບາງ, ສ່ວນມາກຈະປຸກຢູ່ອ້ອມແອ້ມວັດໃຜວັດລາວ, ແຕ່ປາກປ່າສັກລົງເຖິງ ທາດຂາວ. ແຕ່ຖະໜົນສາມແສນໄທ ໄປທິດເໜືອຫາກຳແພງເມືອງນັ້ນ ວັດກໍມີໜ້ອຍ ເຮືອນ ປະຊາຊົນກໍກະແຈກກະຈາຍຕາມທົ່ງນາ. ທີ່ກ້ຳຕາເວັນຕົກຂອງນະຄອນວຽງຈັນມີບ້ານ: ສີຖານ, ຫົວເມືອງ, ອູບມຸງ, ວັດໄຕ, ສີໄຄ, ຢູ່ກ້ຳເໜືອຂອງເມືອງມີບ້ານ: ດົງປ່າລານ, ຮ່ອງແກ, ໜອງບອນ, ໂພນພະເນົາ ເປັນຕົ້ນ. ສ່ວນມາກເຮືອນຂອງຊາວນາຫລັງບໍ່ໃຫຍ່ປານໃດ ຈະເປັນເຮືອນຕູບເສົາໄມ້, ຝາແຕະ, ພື້ນຟາກ, ມຸງຫຍ້າ, ມີຮ້ານ ແລະ ເຮືອນຄົວ, ຊັ້ນລຸ່ມມີກ້ອງໃຕ້ລ່າງ ມີຄອກງົວ ຄອກຄວາຍ ລົກໄກ່ ຄົກໝອງ... ສ່ວນເຮືອນຜູ້ຮັ່ງມີແດ່ກໍແມ່ນເຮືອນສູງຫລັງໃຫຍ່, ເສົາຝັງເປັນໄມ້ແກ່ນ ຝາປະທາຍ, ຝາແປ້ນ ຫລື ຝາສານແຕະ, ມຸງແປ້ນເກັດ ແລະ ຫລືມຸງຝ້າ.

(ຝ້າ: ແມ່ນໄມ້ເຮ້ຍທີ່ສັບແລ້ວ ແບອອກໃຫ້ແປນ ແລ້ວນຳມາມຸງເຮືອນ).



ເຮືອນຂອງຊາວນາທີ່ກຸ້ມຕົນເອງ



ເຮືອນຂອງຊາວນາຮັ່ງມີ

ເຮືອນຈະຫລັງນ້ອຍ ຫລື ໃຫຍ່ ປານໃດກໍຕາມຈະມີເຊຍ, ພາຍໃນເຮືອນ ຈະແບ່ງເປັນ 2 ຟາກ ຟາກໜຶ່ງຈະແບ່ງເປັນບ່ອນທຳບຸນ, ເຕົ້າໂຮມຄອບຄົວ ຫລື ຮັບປະທານອາຫານ, ສ່ວນອີກຟາກໜຶ່ງຂັ້ນເປັນຫລາຍຫ້ອງນອນ, ຫ້ອງໜຶ່ງເປັນຮ້ານໄຫວ້ພະ ແລະ ບ່ອນນອນຂອງຜູ້ເຖົ້າ ສ່ວນລູກຊາຍເຕັມກະສຽນແລ້ວ ຕ້ອງອອກໄປນອນເຊຍ.

- **ຖະໜົນຫົນທາງ.**

ອີງຕາມແຜນທີ່ຂອງ Le Blevec ປີ 1895, ຂອງ Lajonquiere ປີ 1901 ແລະ Klieber ປີ 1905 ກໍເຫັນຮ່ອງຮອຍຖະໜົນເກົ່າຂອງນະຄອນຫລວງລ້ານຊ້າງ, ເຖິງວ່າບໍ່ຊີ້ປານໃດກໍຕາມ ມັນກໍໝາຍເຖິງຕາຜ້າ ຂອງເມືອງໜຶ່ງຈະແຈ້ງ, ລະບົບຖະໜົນມີທັງຖະໜົນທີ່ສ້າງໄປຕາມລວງຍາວຂອງແມ່ນ້ຳຂອງ ແລະ ຖະໜົນທີ່ຕັດສາກັບແມ່ນ້ຳຂອງ:

ຖະໜົນສາຍຫລັກທີ່ຂະໜານກັບແມ່ນ້ຳຂອງ ມີ 3 ເສັ້ນຄື:

+ ຖະໜົນທີ່ 1: ລຽບແຄມຂອງ ແຕ່ວັດໄຕ, ອູບມຸງ, ສີຖານ ຜ່ານປະຕູທີ່ 1 ໄປຕາມແລວຂອງຖະໜົນ ເຈົ້າຟ້າງຸ່ມ ປະຈຸບັນລົງຮອດຫາດຂາວ ຕໍ່ໃສ່ຖະໜົນເມືອງ ຫາດຊາຍຟອງ, ເສັ້ນທາງສາຍນີ້ ມີການຄູນດິນຂຶ້ນ ເພື່ອເປັນຄັນຄູ ປ້ອງກັນນ້ຳຖ້ວມ.

+ ຖະໜົນທີ່ 2: ເລີ່ມຈາກປະຕູວັດອິນແປງ ລຽບວັດອົງຕື້, ວັດມີໄຊ ຜ່ານໜ້າປະຕູຣາຊະວັງ, ໄປຕາມແລວຖະໜົນ ເຊດຖາທິລາດ ດຽວນີ້.

+ ຖະໜົນທີ່ 3: ຈຸດເລີ່ມຕົ້ນແມ່ນ 4 ແຍກສີຫອມ ຕັດລົງມາຈົບທີ່ຖະໜົນມະໂຫສົດ ຕໍ່ໜ້າ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ຊຶ່ງແມ່ນແລວທາງດຽວນີ້ ຂອງຖະໜົນສາມແສນໄຫ, ສ່ວນທີ່ໄດ້ຕໍ່ລົງໄປທິດຕາເວັນອອກ ແລ້ວໂຄ້ງມາຈອດຄືນໃສ່ຖະໜົນເຊດຖາທິລາດ ນັ້ນແມ່ນຕັດໃໝ່ໃນປີ 1920.

+ ເສັ້ນທາງຕັດສາກັບ ແມ່ນ້ຳຂອງ ຈະເຫັນນຳກັນວ່າ ມີປະມານ 19 ເສັ້ນ ນັບແຕ່ປາກນ້ຳປ່າສັກ ເຖິງທ້ວຍຂາວ (ຕາມແຜນທີ່ຂອງ Lajonquiere) ປີ 1901 ເຫັນວ່າ: ຖະໜົນເຫລົ່ານີ້ ແມ່ນຂະໜານກັນ ແລະ ຕັດສາກັບແມ່ນ້ຳຂອງ ໝາຍຄວາມວ່າ: ຈາກທິດໃຕ້ໄປຫາທິດເໜືອ, ເປັນເສັ້ນທາງທີ່ຕັດສາກແຄມຂອງ ຂຶ້ນໄປລະຫວ່າງວັດ, ລະຫວ່າງບ້ານຕ່າງໆ ໄປຫາທົ່ງນາ ເສັ້ນທາງທີ່ສຳຄັນ ມີ 2 ເສັ້ນ ຄື:

+ ຖະໜົນໄປຫລວງພະບາງ: ເລີ່ມຈາກແຄມຂອງເໜືອວັດຈັນ, ຜ່ານລະຫວ່າງກຳແພງວັດອິນແປງ ແລະ ວັດອົງຕື້ ໄປອອກປະຕູເມືອງທີ 2 ຕໍ່ໜ້າໂຮງລະຄອນລຳ ແລະ ຄ້າຍກາຟາເກົ່າ (ແມ່ນຖະໜົນ ເຈົ້າ ອະນຸວົງ ດຽວນີ້) ໄດ້ມີການສ້າງຂົວຂ້າມນ້ຳປ່າສັກ ທີ່ໃຫຍ່ສົມຄວນ

ຮຽກ ກັນວ່າ ຂົວຫລວງ.

+ຖະໜົນໄປທາດຫລວງ: ເລີ່ມຈາກແຄມຂອງ ເໜືອໂຮງໝໍມະໂຫສົດ ຕັດໄປໃສ່ສີ່ແຍກໄຟແດງຕະຫລາດເຊົ້າ (ແລວທາງມະໂຫສົດດຽວນີ້) ຕໍ່ໃສ່ຖະໜົນໜອງບອນດຽວນີ້ເຂົ້າໃສ່ເດີ່ນພະທາດຫລວງ. ຖ້າອີງໃສ່ຮີດຄອງເດີມ ເສັ້ນທາງຈະເຂົ້າປະຕູພະທາດຫລວງ ຢູ່ດ້ານຕາເວັນອອກ. ເມື່ອກ່ອນລືກັນວ່າ: ປະຊາຊົນມາໄຫວ້ພະທາດຫລວງ ຈະມາທາງເຮືອ ເປັນສ່ວນໃຫຍ່ຂຶ້ນຕາມແມ່ນ້ຳ ປ່າສັກ ຕັດໃສ່ຄອງຮ່ອງແຊງ ມາເຖິງບຶງ ທາດຫລວງ ແລ້ວມາເຂົ້າປະຕູທາງດ້ານຕາເວັນອອກນີ້. (ໃນເວລານັ້ນ ບຶງທາດຫລວງ ແມ່ນມີນ້ຳເຕັມບຶງ ຈົນຮອດກຳແພງຊັ້ນນອກ).

+ ຖະໜົນປ້ອງກັນເມືອງ: ທີ່ເພີ່ນໄດ້ສ້າງນັ້ນ ແມ່ນເສັ້ນທາງແຕ່ປາກນ້ຳປ່າສັກ ລຽບໄປຕາມກຳແພງເມືອງເບື້ອງໃນແລ້ວລັດລົງໃສ່ຂົວຂາວ, ເປັນທາງປ້ອງກັນນະຄອນຫລວງແຕ່ຫາກບໍ່ແມ່ນຖະໜົນຂຸນບູລົມ ແລະ ຄູວຽງດຽວນີ້.

ສະພາບເຕັກນິກຂອງເສັ້ນທາງສາຍຫລັກ ສ່ວນມາກຈະຊື່, ກ້ວາງ ຂະໜາດ 2 ກອງມ້ວລົກກັນໄດ້ງ່າຍ, ສ່ວນພື້ນອາດຈະປູດ້ວຍດິນດີຕຳແໜ້ນ ແລະ ມີຮ່ອງລະບາຍນ້ຳ. ສ່ວນເສັ້ນທາງຊອຍຕ່າງໆນັ້ນ ອາດຈະແຄບກວ່າ, ປູດ້ວຍດິນທຳມະຊາດ (ເວລາບູລະນະຖະໜົນເລກ 1 ບໍ່ປະກົດເຫັນຫີນ ຫລື ດິນຈີ່ ແຕ່ປະການໃດ).


ພາຫະນະຂົນສົ່ງທາງບົກແມ່ນລໍ້ກວຽນ, ຊ້າງ, ມ້າ ເປັນຕົ້ນ, ສ່ວນພາຫະນະຂົນສົ່ງທາງນ້ຳມີ: ເຮືອ, ແພ, ໂດຍໃຊ້ແມ່ນ້ຳຂອງ, ນ້ຳປ່າສັກ, ນ້ຳງື່ມເປັນສາຍທາງເດີນເຮືອ, ແຕ່ຫຍຸ້ງຍາກແດ່ໃນລະດູແລ້ງ ຕ້ອງໄດ້ລາກເຮືອຂຶ້ນແກ້ງ. . .

ໃນສະໄໝ ເຈົ້າ ອະນຸວົງ ກໍໄດ້ມີການກໍ່ສ້າງຂົວຂ້າມນ້ຳຂອງ 2 ແຫ່ງ ຄື:

- 1808: ໄດ້ສ້າງຂົວຂ້າມນ້ຳຂອງທີ່ ນະຄອນພະນົມ.

- 1810: ໄດ້ສ້າງຂົວຂ້າມນ້ຳຂອງ ລະຫວ່າງ ບ້ານ ອູບມຸງ ແລະ ສີຊຽງໃໝ່ ແຕ່ເປັນຂົວໄມ້ຊົ່ວຄາວ ເພື່ອໃຫ້ປະຊາຊົນລາວສອງຝັ່ງ ໄດ້ໄຕ່ໄປມາຫາກັນ ແລະ ຕໍ່ຈາກນີ້ ເພີ່ນຍັງໄດ້ສ້າງວັດສີບຸນເຮືອງ ທີ່ເມືອງໜອງຄາຍ ແລະ ວັດຊ້າງເຜືອກ ທີ່ສີຊຽງໃໝ່ ອີກ.


ສ່ວນລະບົບນ້ຳເສຍນັ້ນ ເພິ່ນໄດ້ຂຸດເປັນຮ່ອງໄຫລລົງໄປຮ່ອງທອງ ແລະ ຄູວຽງໝົດ. ການຄົ້ນພົບຮູບ 3 ຫລ່ຽມສູງ 1,50 ແມັດ ກໍ່ດ້ວຍດິນຈີ່ ກ້ອງຄູວຽງໃນເວລາກໍ່ສ້າງຖະໜົນໃນປີ 1998 ນັ້ນ ກໍຢັ້ງຢືນວ່າແມ່ນຮູນ້ຳໄຫລລອດກຳແພງເມືອງ ຫາກບໍ່ແມ່ນຄັນໃດໄຕ່ຂຶ້ນເມືອ ກຳແພງເມືອງ ແຕ່ປະການໃດ. ຖ້າຂຸດຄົ້ນຕໍ່ໃນພາຍໜ້າ ກໍຍັງຈະພົ້ຮູນ້ຳແບບນີ້ອີກຫລາຍບ່ອນ.



ຮ່ອງລະບາຍນ້ຳກ້ອງກຳແພງເມືອງຊັ້ນໃນ

ແພໃຊ້ແຕ່ຂາລ່ອງເທົ່ານັ້ນ, ແຕ່ຂາຂຶ້ນຕ້ອງໃຊ້ເຮືອທີ່ມີຄົນທໍ່ 3-5 ຄົນ. ເຮືອຊ່ວງທີ່ພວກເຮົາເຫັນທຸກວັນນີ້, ເມື່ອກ່ອນແມ່ນເຮືອໄວຂອງທະຫານເຮືອ ໃຊ້ເພື່ອຂັບໄລ່ສັດຕູທີ່ເຂົ້າມາທາງນ້ຳຂອງ. ເວລາທ່ານ V.Wusthof ມາເຖິງວຽງຈັນ 1641, ເພິ່ນກໍໃຊ້ເຮືອຊ່ວງນີ້ນຳໄປປ້ອງກັນເຮືອຂອງແຂກຕ່າງປະເທດ ຊຶ່ງເປັນອາຄັນຕຸກະ ຂອງເຈົ້າແຜ່ນດິນ ເພື່ອນຳທາງ ແລະຮັກສາຄວາມປອດໄພ.

ແຜນທີ່ຂອງ Lajonquiere ປີ 1901





ການຂົນສົ່ງໂດຍສານທາງບົກດ້ວຍຊ້າງ, ຮູບຖ່າຍ ປີ 1893



ເຮືອໂມະ (ເຮືອບອງດ້ວຍໄມ້ເຮ້ຍ), ເປັນເຮືອຂົນສົ່ງຂາລ່ອງແຕ່ ຫລວງພະບາງ ເຖິງວຽງຈັນ

- ເຂດຫັດຖະກຳດິນເຜົາ.

ຕາມທີ່ໄດ້ເລົ່າມາແລ້ວຂ້າງເທິງ, ໃນເຂດໃໝ່ໃຕ້ວຽງຈັນ ຊຶ່ງມີຄົນຄູອ້ອມໄວ້ນັ້ນ ແມ່ນ ເຂດຫັດຖະກຳດິນເຜົາ ຊຶ່ງນ້ອງຊາຍເຈົ້າໄຊເຊດຖາ ເຈົ້າ ວໍລະວັງໂສ ເປັນຜູ້ກໍ່ຕັ້ງຂຶ້ນ, ເພາະວ່າ ເພິ່ນໄດ້ຄົ້ນພົບເຕົາດິນເຜົາ ແລະ ເຄື່ອງເສດດິນເຜົາຫລາຍຢູ່ໃນເຂດນີ້. ເພິ່ນຜະລິດຂຶ້ນມາເພື່ອ ໃຫ້ປະຊາຊົນໄດ້ໃຊ້ສອຍດ້ວຍລາຄາຖືກ ແທນທີ່ຈະນຳເຂົ້າມາຂາຍດ້ວຍລາຄາແພງ.

4. ສັງຄົມ ວັດທະນະທຳ ໃນສະໄໝ ເຈົ້າ ສຸລິຍະວົງສາ ທຳມິກະລາດ.

ສັງຄົມລາວໃນເວລານັ້ນ ແມ່ນລະບອບສັກດິນາ ທີ່ບໍ່ທັນລວມສູນປະເທດ ມີກະສັດປົກ ຄອງອົງດຽວທີ່ມີສິດຕັດສິນທຸກຢ່າງທີ່ກົດໝາຍກຳນົດໄວ້ ຮຽກວ່າ:" ຄຳພີພະທຳມະສາດ" ທີ່ອີງ ໃສ່ສິນ 5 ປະການ ຂອງພຸດທະສາສະໜາ, ຮີດສິບສອງຄອງສິບສີ່ ແລະ ສິນທຳຕ່າງໆເປັນຫຼັກ. ໃນການປົກຄອງບ້ານເມືອງນັ້ນ ພະອົງກໍໄດ້ປຶກສາຫາລືນຳອົງມະຫາເສນາເລື້ອຍໆ ເພື່ອຄວາມ ຊອບທຳ. ເຈົ້າສຸລິຍະວົງສານີ້ ເປັນກະສັດທີ່ເຂັ້ມແຂງ ຮັບຟັງຄຳເຫັນຂອງເສນາບໍດີ ນັກປາດອາ ຈານ ພະສົງອົງຄະເຈົ້າ ຕະຫລອດຮອດສາມັນຊົນທຳມະດາ. ພະອົງໄດ້ເປັນແບບຢ່າງໃນການ ເຄົາຣົບພຸດທະສາສະໜາ ນັບຖືກົດໝາຍ ແລ້ວພວກຂຸນນາງ ຂ້າຣາຊະການ ແລະ ໄພ່ພົນທັ້ງ ຫລາຍ ກໍຍອມຮັບປະຕິບັດຕາມ ເພາະພະອົງເປັນແວ່ນແຍງໃຫ້ແກ່ປວງຊົນ. ລະບຽບຂອງທະ ຫານຂ້າຣາຊະການ ກໍເຄັ່ງຄັດທີ່ສຸດ ຂະໜາດ ເຈົ້າ ຣາຊະບຸດ ລູກຊາຍຄົ້ງອົງດຽວແທ້ໆ ຂອງ ພະອົງ ເມື່ອກະທຳຜິດ ກໍຈຳເປັນໄດ້ໃຫ້ປະຫານຊີວິດ ເພື່ອບໍ່ໃຫ້ຜູ້ອື່ນເອົາເປັນແບບຢ່າງ, ຂຸນ ນາງຂ້າຣາຊະການຜູ້ໃດ ສໍ້ລາດບັງຫລວງ ຫລື ເປັນໄສ້ເສິກໃຫ້ສັດຕູກໍຖືກລົງໂທດ ເຖິງປະຫານ ຊີວິດ ເຊັ່ນດຽວກັນ.


ຮີດຄອງປະເພນີ ໃນຍຸກນັ້ນແມ່ນຈົບງາມຫຼາຍ ຈົນຄຸນພໍ່ ມາຣີນີ ແລະ ເລີຣີອາ ຍ້ອງວ່າ: " ພົນລະເມືອງລາວມີຂະນົບທຳນຽມອັນດີ, ເນື່ອງຈາກ ທຳມະຊາດ ໄດ້ປະກອບໃຫ້ມາແຕ່ເດີມ. ເຂົາເປັນຄົນເວົ້ານິ້ວຫົວມ່ວນ ສອນງ່າຍສະຫລາດ ແລະ ປົກກະຕິແລ້ວມັກຄວາມສະຫງົບ ແລະ ມັກພັກຜ່ອນ. ເຂົາພໍໃຈຕ້ອນຮັບຊາວຕ່າງປະເທດ ໂດຍບໍ່ມີຄວາມຂີ້ຄຽດ ລະແວງສົງໄສຫຍັງ ເລີຍ, ເຂົາປະພຶດຕົວຢ່າງນີ້ມນວນອ່ອນຫວານ ມີຄວາມຊື່ສັດ ບໍ່ມັກສໍ້ໂກງແຕ່ປະການໃດ. ກ່ຽວ ກັບຊັບສົມບັດ ຫລື ສິ່ງຂອງໃດໆກໍຕາມ ທີ່ໄດ້ເກັບເຮ່ຍຈາກຊາວຕ່າງປະເທດ ຫລື ເຄື່ອງຂອງ ຜູ້ອື່ນ ເມື່ອເຈົ້າຂອງເຂົາມາຫວງຂໍຄືນ ເຂົາກໍສົ່ງຄືນໃຫ້ໂດຍດີ ໂດຍບໍ່ໄດ້ຄິດເອົາສິ່ງຕອບແທນ ແຕ່ຢ່າງໃດ ພໍແຕ່ໄດ້ຮັບຄວາມຂອບໃຈເທົ່ານັ້ນກໍພໍແລ້ວ ເຂົາຖືວ່າ ນ້ຳໃຈອັນດີມີຄຸນຄ່າຫລາຍ ກວ່າສັບສົມບັດອື່ນໆ. ໃນສັງຄົມລາວບໍ່ຄ່ອຍເຫັນເຂົາຜິດຖຽງກັນເລີຍຈະຂ້າຈະຕີກັນຍິ່ງບໍ່ຄ່ອຍ ມີພຽງແຕ່ຮ້າຍດ່າ ຫລື ປະມາດກັນ ກໍຍັງຖືກປັບໄໝໄປແລ້ວ ".

ຕາມຮີດຄອງ ນອກຈາກເຊື້ອກະສັດແລ້ວ ປະຊາລາສະດອນບໍ່ມີສິດເອົາເມຍຫລາຍຄົນ, ບໍ່ທັນແຕ່ງດອງ ບ່າວສາວ ບໍ່ມີສິດຈັບບາຍກັນ, ຍິງຜູ້ໃດມີລູກກ່ອນດອງ (ລູກທາງ) ນັ້ນແມ່ນເປັນທີ່ລັງກຽດຂອງສັງຄົມ. ຜູ້ໃດຂີ້ລັກສໍ້ໂກງຂອງຜູ້ອື່ນ ຫລື ສໍ້ລາດບັງຫລວງ, ທຳມິດສະຈາມ (ຫລິ້ນຊູ້ ຈາກຜົວ ຫລື ເມຍ) ແມ່ນຖືກສັງຄົມນິນທາກ່າວຂານມາຢູ່ຕະຫລອດ.

ຜູ້ຊາຍເຕັມກະສຽນແລ້ວ ຕ້ອງເປັນຊາຍສະກັນຂອງຊາດ ເທື່ອເອົາເມຍແລ້ວ ຕ້ອງເປັນຫົວໜ້າຄອບຄົວ ຮັບພາລະວຽກເຊັ່ນ: ໄປເປັນທະຫານ, ໄປກໍ່ສ້າງສາທາລະນະປະໂຫຍດ, ປຸກເຮືອນຊານ ແລະ ວຽກໄຮ່ການນາຕ່າງໆ ຊຶ່ງລ້ວນແຕ່ແມ່ນວຽກໜັກໜ່ວງທັ້ງນັ້ນ.



ຂະນົບທຳນຽມຄົນວຽງຈັນຮັບແຂກ



ລູກສາວເຈົ້າເມືອງເຈລະຈາກັບແຂກຕ່າງປະເທດ

ສ່ວນຜູ້ຍິງ ເມື່ອເປັນສາວແລ້ວກໍຕ້ອງສະຫງ່ຳງາມຄ່ຳງາມຄຶມ ຢູ່ໃກ້ສາຍຕາຂອງພໍ່ແມ່ຢູ່ສະເໝີ, ໃນເມື່ອເອົາຜົວແລ້ວ ກໍຕ້ອງຊື່ສັດບໍລິສຸດຕໍ່ສາມີ, ເປັນແມ່ເຮືອນທີ່ດີ ຮູ້ລ້ຽງລູກຫລານໃຫ້ໃຫຍ່, ຮູ້ແຕ່ງຢູ່ຄົວກິນ, ຮູ້ປະຢັດມັດທະຍັດ ຖະໜອມຖ່ອມຕົວ ນຸ່ງຖືຕາມປະເພນີອັນຈົບງາມມີແພບ່ຽງສົ້ນມີຫົວມີຕີນ ບໍ່ເຂີນກາຍຫົວເຂົ່າຈັກເທື່ອ ປາກຈາອ່ອນຫວານ ຮູ້ຈັກຮັບແຂກຄຶມ ຮູ້ເຂົ້າວັດຟັງ ທຳ ແລະ ອື່ນໆ.

5. ສິລະປະ ວັນນະຄະດີ ລາວລ້ານຊ້າງ ຂະຫຍາຍຕົວ.

ອີງຕາມປຶ້ມ " ປະໂຫຍດຂອງວັນນະຄະດີ " ຂອງທ່ານ ມະຫາສີລາ ວີຣະວົງ ກ່າວໄວ້ວ່າ: ພາສາລາວໄດ້ມີມາແຕ່ ພ.ສ 600 ຫລືວ່າໄດ້ 1942 ປີມາແລ້ວ, ນັ້ນກໍ ໝາຍຄວາມວ່າ ວັດທະນະທຳຂອງລາວເຮົາໄດ້ມີຮາກເຫງົ້າມາແຕ່ເທິງນານທີ່ສຸດ. ບົດກາບ ກອນ ກອນລຳ ຄຳຜະຫຍາ ແລະ ນິທານຕ່າງໆ ກໍໄດ້ມີມາແຕ່ດຶນນານແລ້ວ ຊຶ່ງບາງຄັ້ງກໍໄດ້ ຂຽນເປັນພາສາປາລີ ຫລື ສັນສະກິດ ແຕ່ເປັນຕົວອັກສອນ ຫຼື ຕົວທຳລາວ ຊຶ່ງໄດ້ພົບພໍ້ໃນ ໜັງສືໃບລານ ໃນວັດ ແລະ ໄດ້ຍິນໃນບຸນຄົບຈັນປະເພນີ ບ່າວ ແລະ ສາວ ໃນທ້ອງຖິ່ນຕ່າງໆ ຕົວຢ່າງ:

ຝ່າຍຊາຍທ້າທາຍ: “ ນ້ຳຕ້ອງຕາດ ຄືນ້ອງແກ່ວ່ງຫລາ
ນ້ຳຕ້ອງຜາ ຄືນ້ອງແກ່ວ່ງອີ້ວ
ຟ້າຍິກຄື້ວ ຄືນ້ອງແກ່ວ່ງແຂນ ແທ້ນໍ
ຝ່າຍຍິງຕອບ: ນ້ອງນີ້ແນວຊາດເຊື້ອ ດອກສະເດ່ືອບານຂາວ
ໃຜບ່ໍຫລຽວຕາມອ້ຽ ຊິບານດາຍແທ້ງເປ່ົາ
ໃຜບ່ໍເກັບຮວດຮ້ອຍ ຊິບານແທ້ງລົ່ນດາຍ ແທ້ແລ້ວ”

ຜ່ານແຕ່ລະຍຸກ ແຕ່ລະສະໄໝກໍໄດ້ມີການແຕ່ງການກອນ ແລະ ເລື້ອງລາວຕ່າງໆ:

* ໃນສະໄໝ ພະຍາ ຫລ້າແສນໄຕພູວະນາດ: ໄດ້ມີການຂຽນເລື້ອງ ພຸດທະສາສະໜາ ຫຼາຍເລື້ອງມະຫາຊາດ, ພະເວດສັນດອນ...

* ໃນສະໄໝ ເຈ້ົາ ວິຊຸນນະລາດ ປີ 1500 ໄດ້ມີການຂຽນ:

- ຕຳນານ ຂຸນບູລົມ ເປັນປະຫວັດສາດລາວເກ່ົາແກ່ ຂຽນໂດຍ ພະມະຫາເທບຫລວງ ວັດວິຊຸນ.

- ຄຳໂອວາດຂອງ ພະຍາ ຟ້າງຸ່ມ ຂຽນໂດຍ ພະມາຫາເທບຫລວງ ວັດວິຊຸນ.

- ນິທານ ນາງ ຕັນໄຕ ຂຽນໂດຍ ມະຫາຣາຊະຄູ ວັດວິຊຸນ.

- ເລື້ອງ ທ້າວ ຮຸ່ງ ທ້າວ ເຈືອງ ປີ 1070 ເປັນເລື້ອງປະຫວັດສາດ ທີ່ເກີດມາກ່ອນໜ້ານີ້ ແລ້ວ ຕົວຢ່າງ: ຕອນ “ ນາງ ງ້ອມ ອ້ຽເຊີນແຖນລົງເຕ້ົາຄ່ວງ” ຊ່ຶງນາງພວມແຕ່ງຕົວຢູ່:

“ ປັກປ່ວງແກ້ວແກມປິ່ນ ຫົວແຫວນ
ລຳໆ ບາຍບວຍທອງແຕ່ງແຍງ ເກ້ຍເກ້ົາ
ມາລາສ້ອຍ ແສນດວງ ປະດັບເກດ
ຜ້ວບ່ໍເສ້ົາ ງາມລົ້ນ ລົ່ນຂຽນ”

*** ສະໄໝ ເຈ້ົາ ໂພທິສະລາດ ແລະ ເຈ້ົາ ໄຊເຊດຖາທິລາດ (1520 -1570).**

ໃນໄລຍະນີ້ປະເທດຊາດເຂ້ັມແຂງ ປະຊາລາສະດອນ ມີຄວາມສຸກເພາະເຈ້ົາແຜ່ນດິນ ມີ ສິນທຳ ແລະ ໄດ້ທຳທຸກສ່ິງທຸກຢ່າງ ເພ່ືອຊາດເພ່ືອປະຊາຊົນ. ພະອະລິຍະວົງສາ ໄດ້ແຕ່ງຕຳ ນານ ພະແກ້ວມໍລະກົດ, ພະບາງ, ພະແຊກຄຳ, ພະແກ່ນຈັນ ແລະ ຂຽນຕຳນານ ຂຸນບູລົມ ສະ ບັບທ່ີ 2.

* ສະໄໝ ເຈ້ົາ ສຸລິຍະວົງສາ ທຳມິກະລາດ (1638 -1690) ໜ້ັງສ່ືວັນນະຄະດ່ີ ໄດ້ ເກ່ີດຂ້ຶນຫລາຍໃນເວລານ້ີ ເພາະບ້ານເມ່ືອງມ່ີຄວາມສະຫງ່ົບ, ລາວມ່ີມ່ິດສຳພັນກັບຫລາຍປະ ເທດໃນອາຊ່ີ ແລະ ບາງປະເທດໃນເອ່ີຣ່ີບອ່ີກ, ກອງທັບກໍເຂ້ັມແຂງ, ເສດຖະກ່ິດກໍພັດທະນາດ່ີ,

ປະ ຊາຊົນມ່ວນຊື່ນ ຈຶ່ງເກີດມີການກອນ ກອນລຳ ກອນເຊີ້ງ ຄຳຜະຫຍາ ແລະ ນິທານຄຳກອນ ເກີດຂຶ້ນຢ່າງຫລວງຫລາຍ ຊຶ່ງເປັນທີ່ຮັບຮູ້ຈາກມວນຊົນລາວພາຍໃນ ແລະ ຕ່າງປະເທດ.

ບົດລັນນະຄະດີອັນໂດ່ງດັງ ແລະ ລືຊໍ່ກໍມີຄື:

- ເລື່ອງ ສິນໄຊ ແຕ່ງເປັນຄຳກອນ ໂດຍ ປາງຄຳ.

ໃນນັ້ນ (ອາພິບຫລານຊາຍ):

" ເຈົ້ານີ້ ເປັນຊາດເຊື້ອ ອີງອ່ອນຫລານອາ ແທ້ແລ້ວ
ອາກໍໂຊມເອົາຫລານ ໃສ່ເພົາແພງລ້ຳ
ລຳລຳນີ້ວ ທະວາຍຍິງໂລມລູບ
ຈົດຫລ່າຫລົ້ມ ຫລີງພັ້ງເພື່ອຄະນິງ
ນາງກໍຮັກແຈ່ມເຈົ້າ ຊົມຈູບຈອມຂວັນ
ຫລານດຽວເດີນ ດັ່ງລືເຖິງຂ້ອຍ
ມີທັ້ງຜາຊັນລ້ຳ ຫລາຍພະນອມນ້ຳລ່ວງ
ມີທັ້ງດົງດ່ານຊ້າງ ເສືອຮ້າຍເຜດຜີແມ່ເດ"

- ສຸງວສະຫວາດ ເປັນຄຳເຕືອນສະຕິ ສຸພາສິດ ແລະ ຄຳສັ່ງສອນໄປນຳພ້ອມ ຊຶ່ງຄົນ ລາວເຮົາມັກຈະເວົ້າອອກມາ ຕາມການລະໂອກາດຕ່າງໆ.

+ ເປັນຄົນນີ້ ໃຫ້ທຳຕົນເໝືອນນົກເຈົ່າ.
ບາດວ່າ ບິນແຜ່ວຜ້າຍ ຈຶ່ງຂາວແຈ້ງດັ່ງນົກຍາງ.
+ ໄວປາກເສຍສິນ ໄວຕົນຕົກກົກໄມ້
+ ເຈົ້າຜູ້ມີຄວາມຮູ້ ເຕັມພຸງພຽງປາກກໍດີທ້ອນ
ສອນໂຕເອງບ່ໄດ້ ໃຜຊິຍ້ອງວ່າດີ
+ ຄັນເຈົ້າໄດ້ຂີ່ຊ້າງ ກັ້ງຮິ່ມເປັນພະຍາ
ຢ່າໄດ້ລືມເສນາ ຜູ້ແຫ່ນຳຕົນຊ້າງ
+ ນົກອີ່ອ້ຽງກິນໝາກໂພໄຮ ແຊວໆສຽງພັດບ່ມີໃຕຮ້ອງ
ໃຕຢູ່ກ້ອງແຫງນຄໍກິນງ່ຳເທິງ ໃຕຢູ່ເທິງກົ້ມຫົວກິນງ່ຳກ້ອງ
ບາດຊິຮ້ອງ ໂຕດຽວທັ້ງໝູ່.

- ກອນປູ່ສອນຫລານ ແຕ່ງໂດຍເພຍ ແກ້ວ ດວງຕາ ເປັນຄົນວຽງຈັນນີ້ເອງ.
- ອິນທິຍາມສອນລູກ ແຕ່ງໂດຍ ນັກປາດ ອິນທິຍາມ.
- ພະຍາ ປັດເສນຖາມເຫດ ແຕ່ງໂດຍເພຍ ລາຊະມາດ.

ນິທານຄຳກອນຕ່າງໆ... ຈຳປາສີ່ຕີ້ນ, ກາລະເກດ, ຂຸນທຶງ, ນາງແຕງອ່ອນ ເປັນຕົ້ນ.

* ໃນສະໄໝ ເຈົ້າ ອະນຸວົງ: ທ່ານ ມະຫາ ສີລາ ວີຣະວົງ ກໍ່ໄດ້ຄົ້ນພົບກອນລຳ ແລະ ໜັງ ສືສິບກວ່າເທລັ້ມ ໃນຫໍສະໝຸດ ກຸງເທບ ໃນນັ້ນ ອັນສຳຄັນແມ່ນ " ສານລຶບສູນ ".

ນອກຈາກໜັງສືວັນນະຄະດີທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກໍ່ຍັງມີຫລາຍກາບກອນ ກອນ ລຳ ແລະ ເລື່ອງນິທານຕ່າງໆ ທີ່ຄົນລາວເລົ່າສູ່ກັນຟັງມາໄດ້ຫລາຍຊົ່ວຄົນແລ້ວເຊັ່ນ:

ເລື່ອງ: ຊຽງໜ້ຽງ (ເຈົ້າ ປັນຍາ), ທ້າວ ສີທົນ ນາງ ມະໂນລາ, ທ້າວ ສຸວັນນະທຶງ, ນາງ ຫລ້າ ນາງລຸນ, ນາງ ແກ້ວໜ້າມ້າ, ກໍ່າພ້າຜີນ້ອຍ ແລະ ອື່ນໆ ຊຶ່ງບໍ່ທັນຮູ້ຈັກວ່າໃຜເປັນຜູ້ແຕ່ງ ແລະ ແຕ່ງອອກໃນເວລາໃດ?.


ຍັງມີກາບກອນໜຶ່ງທີ່ທ່ານ ທອງພົນ ສຣີຈັກ ຊຶ່ງເປັນຄົນນະຄອນພະນົມ ໄດ້ບັນຍາຍເຖິງ ເມືອງວຽງຈັນ ໃນສະໄໝ ເຈົ້າອະນຸວົງ ໃນເລື່ອງ " ເພັດພື້ນເມືອງວຽງຈັນ " ຂຽນປີ 1939 ວ່າ:"

ຍາມນີ້ ຍັງມີນະຄອນເຮດຮ້ອງ ຮຽກຊື່ວຽງຈັນ ປາການສູງ ແວດລະວັງແຄມນ້ຳ
ຫໍເລັຍຕັ້ງ ປະຕູທະວານທັ້ງສີ່ ຢາຍໜ່ວຍປ້ອມ ລະວັງໄວ້ຢູ່ສະລອນ
ຫໍປາງຕັ້ງ ກາງເມືອງດູອາດ ຄຳແລະແກ້ວ ເຮືອງເຂັ້ມຮຸ່ງເຮືອງ
ຍາມເມື່ອ ລົມພັດຕ້ອງ ສຽງກະດິງດັງມ່ວນ ຄືດັ່ງຜາສາດແກ້ວ ເມືອງໄທ້ເທບດິງ ແທ້ແລ້ວ
ຕົນກະສັດໄທ້ ສະເວັຍເມືອງເອກະລາດ ຊື່ວ່າ ພະອະນຸວົງ ເຈົ້າ ບຸນກວ້າງນັ່ງປອງ ຫັ້ນແລ້ວ
ອັນວ່າ ເທວີແກ້ວ ທຽມອົງພະຣາຊາ ຊື່ວ່າ ຄຳປ້ອງເຈົ້າ ແຝງຂ້າງຝ່າຍຂວາ
ອັນວ່າ ເທວີຊ້າຍ ຄຳຈັນຫັດຖະບາດ ສະໜົມໜຸ່ມນ້ອຍ ພໍຮ້ອຍແວດລະວັງ
ພາຍສານຊ້າງ ສາມພັນຕົວອາດ ມ້າມິ່ງຕົ້ນ ສາມຮ້ອຍເຄື່ອງຄຳ ແທ້ແລ້ວ
ເສນາຊັ້ນ ອາສາສາມໝື່ນ ເຂົານັ້ນ ຄົນຂະຫຍັນກ້າ ຟັນຂ້າກໍ່ບໍ່ຕາຍ ແທ້ແລ້ວ
ມີທັ້ງໄທເທດພ້ອມ ຂັບເສບສຽງລຳ ຫົວທຽມປັກ ປິ່ນຕົນເມືອຟ້າ
ມົງກຸດແກ້ວ ສຸບຫົວເຢາະຢ່ອງ ຄ້ຽກ່ອມພ້ອມ ທວຍເຫຼື້ອມແກ່ວງແພນ
ກະສິງໂຂນພ້ອມ ມະໂຫລີເປັນໝູ່ ແອະແອ່ນຟ້ອນ ຖະຫວາຍເຈົ້າສູ່ຍາມ
ຟ້ຽຍົນພິນພາດຕ້ອງ ສຽງເສບສວນໄລ ພຸ້ນເຢີ ທ້ຽລະບຳສຽງ ຄຸ່ຍແຄນເພງໄດ້
ທອຍສ້ຽງກ້ອງ ສົມສຽງກະຈັບປີ່ ຊຸງຕ່ອຍຕ້ອງ ກົມກໍ້ວປີ່ແຖມ
ຄ້ອງກອງພ້ອມ ໄຊຍະພາດສັ່ນສຽງ ສຽງສະນັ່ນກ້ອງ ກົມກໍ້ວກ່ອມໃຈ
ໄທລະບຳຟ້ອນ ແກມລະຄອນເຢາະຢອກ ແຂນໃສ່ມ້າວ ເທິງສ້ອຍເຄື່ອງຄຳ
ສ້ຽວານອະນັນກ້ຽວ ສາຍສະເອ້ງສຸບສອດ ຄືດັ່ງອິນແຕ່ງຕັ້ງ ມາແທ້ແຕ່ສະຫວັນ
ກໍ່ບໍ່ມີອາດຢ້ານ ເມືອງອື່ນມາຜະຈົນ ໄດ້ແລ້ວ ຢູ່ກະເສມສຸກ ໄພ່ໄທທຽວຄ້າ
ຍູທ່າງທຳບຸນສ້າງ ຫລາຍປະການທຸກສິ່ງ ວັດກໍ່ຕັ້ງ ຄຳແກ້ວ ເຮືອເຮືອງ ແທ້ແລ້ວ.

ສັງລວມແລ້ວ,ຈຶ່ງເຫັນວ່າຊາດລາວ ຄົນລາວເຮົາແມ່ນບໍ່ໄດ້ຫລ້າຫລັງເລີຍ ທາງດ້ານວັນນະຄະດີນີ້.

ດ້ານດົນຕຼີ: ຊາວລາວບັນດາຊົນເຜົ່າ ກໍເຄີຍມີການຟ້ອນ ຂັບລຳ ເຄື່ອງດົນຕຼີເສບ ສະເພາະ ຂອງແຕ່ລະເຜົ່າໃຜມັນ, ສ່ວນຢູ່ໃນເມືອງວຽງຈັນນັ້ນ ໄດ້ມີເຄື່ອງເສບຫລາຍຢ່າງຄື: ເຄື່ອງເສບນ້ອຍ ແລະ ວົງດົນຕຼີໃຫຍ່ ຊຶ່ງຍັງໄດ້ມີໃຫ້ໄດ້ເຫັນ ແລະ ໄດ້ຍິນມາໃນທຸກວັນນີ້.

ວົງດົນຕຼີໃຫຍ່ນີ້ ໃຊ້ໃນເວລາແຫ່ຂະບວນໃຫຍ່ຂອງເຈົ້າແຜ່ນດິນ ໃນໂອກາດບຸນໃຫຍ່ຕ່າງໆ ເຊັ່ນ ບຸນພະທາດຫລວງເປັນຕົ້ນ. ສັງຄົມລາວກໍຍັງໄດ້ນຳໃຊ້ໃນບຸນສາສະໜາໃຫຍ່ເຊັ່ນ: ບຸນມະຫາຊາດ, ທອດກະຖິນ, ທຳກອງບວດກອງຫົດ, ແຫ່ບຸນພະເວດເປັນຕົ້ນ.




ໝາຍເຫດ:

- ດົນຕຼີນ້ອຍປະກອບດ້ວຍ: ຊໍໂອ້, ຊໍອີ້, ຄັດຕະປີ່, ປີ່, ກອງຕະໂພນ ແລະ ຊິ່ງ. ເພີ່ນນຳໃຊ້ໃນງານຄອບຄົວ, ງານຄົບ ຈັ່ນໃນບ້ານ, ໃນບຸນວັດຕ່າງໆ.

-ໃນບຸນບັ້ງໄຟຈະມີກອງຫາງ, ຄ້ອງ ແລະ ແຊ່ງ. ບາງຄັ້ງກອງຫາງກໍ່ໃຊ້ໃນບຸນວັດເຊັ່ນກັນ.

- ແຄນ ແມ່ນເຄື່ອງດົນຕຼີດ່ຽວໃຊ້ໃນການຄັບລຳທ້ອງຖິ່ນ ເຊັ່ນ: ລຳພວນ, ລຳລ້ອງງຶ້ມ, ລຳລ່ອງຂອງ ແລະ ລຳທ້ອງ ຖິ່ນຕ່າງໆ.

ເຄື່ອງເສບນ້ອຍ



ວົງດົນຕີໃຫຍ່

" ພະຣາຊະວັງນີ້ (ນະຄອນວຽງຈັນ) ແມ່ນກວ້າງຂວາງທີ່ສຸດ ແລະ ຄັນເຮົາບ່ສັງເກດຄັກ ກໍເໝືອນເປັນເມືອງໜຶ່ງຕ່າງຫາກ ເພາະວ່າ ມີຄົນຢູ່ຫັ້ນມາກມາຍເຫລືອລົ້ນ. ມີເຮືອນປຸກລຽນ ເປັນແຖວສຳຫລັບເສນາທິການ ແລະ ນາຍທະຫານ ".


ຈຳນວນພົນໃນເມືອງເອກນີ້ຄາດວ່າ ມີປະມານ 50,000 ຄົນ ເຜົ່າພົນໃຫຍ່ທີ່ມາຕັ້ງຫລັກ ຢູ່ນີ້ກ່ອນສະຕະວັດທີ 5 ນັ້ນ ກໍແມ່ນເຜົ່າໄທ - ລາວ ຕໍ່ມາກໍມີເຜົ່າມອນ ແລະ ຂະເໝນເຂົ້າມາ ຢູ່ນຳ. ເນື່ອງຈາກວ່າວຽງຈັນໄດ້ມີການປ່ຽນແປງຢູ່ເລື້ອຍໆ ຍ້ອນເຫດການປະຫວັດສາດຕ່າງໆ ນັ້ນ, ຈຳນວນພົນລະເມືອງ ແລະ ຊົນເຜົ່າກໍມີການປ່ຽນແປງໄປນຳ. ການເຄື່ອນຍ້າຍຂອງປະຊາ ຊົນບັນດາເຜົ່ານີ້, ຕາມທິດສະດີແລ້ວມາຈາກສາເຫດຕ່າງກັນ ດັ່ງນີ້:

1. ຍ້ອນເສີກສົງຄາມ: ເພາະວ່າສົງຄາມສະໄໝກ່ອນ ແມ່ນຍາດຊິງກັນເອົາຊັບສົມບັດ ຂອງມີຄ່າຕ່າງໆ ເຊັ່ນ: ເງິນ, ຄຳ, ເພັດ, ພອຍ, ດົນແດນ ຊັບສົມບັດເປັນ (ຄົນ) ເພື່ອເອົາໄປ ເປັນຂ້າທາດ ແລະ ຊ້າງ, ມ້າ, ງົວ, ຄວາຍ ເພື່ອເປັນພາຫະນະຂົນສົ່ງ ແລະ ສະບຽງອາຫານ.

2. ຍ້ອນຄວາມບໍ່ສະຫງົບ: ໃນທ້ອງຖິ່ນໃດ ຫາກມີຜູ້ຮ້າຍຊາຍໂຈນ ປຸ້ນສະດົມເລື້ອຍໆ, ເຈົ້ານາຍຂັດແຍ່ງກັນ ປະຊາຊົນກໍຈະອົບພະຍົບໜີໄປແຫ່ງອື່ນ.

3. ຍ້ອນເສດຖະກິດ: ປະຊາຊົນຈະຊອກຫາແຫ່ງທຳມາຫາກິນທີ່ສະດວກສະບາຍກວ່າ, ມີດົນປູກຝັງ, ມີຫ້ວຍນ້ຳອັງປາ ແລະ ມີຄວາມສີວິໄລກວ່າ.

4. ຍ້ອນການປ່ຽນແປງອຳນາດການປົກຄອງ: ແຫ່ງໃດມີການປົກຄອງດີມີສົມທຳ, ປະຊາ ຊົນກໍຈະເຂົ້າມາເພິ່ງປາລະມີ, ແຫ່ງໃດຫຍຸ້ງຍາກ, ບໍ່ມີສົມທຳປະຊາຊົນ ກໍຈະອົບພະຍົບໜີໄປ ເປັນເລື່ອງທຳມະດາ.



ອາວຸດ ແລະ ເຄື່ອງມືກະສິກຳ ຂອງຊາວລາວ, ຮູບແຕ້ມຈາກລາຍເສັ້ນ
ລະຫວ່າງປີ 1866 - 1868

ເມື່ອເຈົ້າ ໄຊເຊດຖາຍ້າຍເມືອງເອກມາຢູ່ວຽງຈັນນັ້ນ, ແນ່ນອນຕ້ອງຍ້າຍຂ້າຣາຊະການ, ເສນາອາມາດຕະຫລອດຮອດນາຍທະຫານ ແລະ ຄອບຄົວຈາກ ນະຄອນຫລວງພະບາງ ລົງມາຢູ່ວຽງຈັນນຳ ແລະ ກໍມີປະຊາຊົນເຂດລ້ອງງຶ່ມລົງມາເສີມຕື່ມອີກ, ດັ່ງນັ້ນ ຈຳນວນພົນລະເມືອງຈຶ່ງມີເຖິງ 5 ໝື່ນຄົນ ໂດຍບໍ່ນັບກອງທະຫານ ແລະ ປະຊາຊົນເກົ່າທີ່ຢູ່ມາກ່ອນແລ້ວ ໃນເຂດເໜືອປາກນ້ຳປ່າສັກຂຶ້ນໄປ.

ໃນສະຕະວັດທີ 16 ນັ້ນ, ໄດ້ຮູ້ກັນວ່າ ສັກດິນາພະມ້າ ໄດ້ບຸກເຂົ້າວຽງຈັນ 3 ຄັ້ງ (1563, 1571 ແລະ 1575) ແຕ່ລະຄັ້ງນັ້ນ ເຂົາໄດ້ກວາດເອົາປະຊາຊົນລາວໄປບໍ່ໜ້ອຍ, ຈຶ່ງເຮັດໃຫ້ພົນລະເມືອງວຽງຈັນຫລຸດລົງຫລາຍ. ໃນໄລຍະຕໍ່ມາກໍມີພວກໂຈນຫ້ໍ ເຂົ້າມາປຸ້ນສະດົມປະຊາຊົນ ແຂວງພາກເໜືອ ອັນໄດ້ເຮັດໃຫ້ປະຊາຊົນເຂດນີ້ອົບພະຍົບລົງມາໃຕ້, ຄົນຊຳເໜືອລົງມາຢູ່ ກາສີ, ວັງວຽງ, ນາມອນ ຄົນຊຽງຂວາງລົງມາຢູ່ວຽງຈັນ, ບໍລິຄຳໄຊ ແລະ ພາກອີສານ ຂອງໄທ ຊຶ່ງເມື່ອກ່ອນແມ່ນດິນແດນຂອງລາວ (ໄດ້ຄົ້ນພົບວັດຖຸບູຮານຂອງຊາວພວນຢູ່ບ້ານຊຽງ ແຂວງ ອຸດອນ ໃນປະເທດໄທ ຫລາຍຊິ້ນສ່ວນ).

ມະຫາບຸຣຸດລາວ ຜູ້ສ້າງປະຫວັດສາດ ໃນສະໄໝ ອານາຈັກລາວລ້ານຊ້າງ



ເຈົ້າໄຊເຊດຖາທິລາດ (1534-1572)



ເຈົ້າສຸລິຍະວົງສາ (1613-1695)




ເຈົ້າອະນຸວົງ (1769-1829)



ເຈົ້າຣາຊະວົງ ລູກຊາຍ ແລະ ແມ່ທັບໃຫຍ່
ຜູ້ເກັ່ງກ້າອາດຫານ ຂອງເຈົ້າອະນຸວົງ
ໄດ້ຫາຍສາບສູນໄປ ໃນ ປີ 1828

ຜັງເມືອງ ນະຄອນຫລວງວຽງຈັນ ສະໄໝ ອາຈາຈັກລາວລ້ານຊ້າງຮຸ່ງເຮືອງ




ເຫຼັ້ງ ສະພາບ		ຊື່ບ້ານຕ່າງໆໃນສະພາບປະຈຸບັນ			
	ເຂດທາງລາຍການ	W 1	ບ້ານສະຫວ່າງ	W14	ບ້ານພະໃນ
	ກຳແພງເມືອງ	W 2	ບ້ານທຸ່ງຫົນ	W15	ບ້ານຫ້ວຍໂຮກ
	ປະຕູເມືອງມີ 4-6	W 3	ບ້ານ ກາງ	W16	ບ້ານຫົວທຸ່ງ
	ປ້ອມຮ້ານມີ 12-16	W 4	ບ້ານ ສະຫວ່ຽ	W17	ບ້ານ ຫ້ວຍ
	ທ້ອງສະໜາມ	W 5	ບ້ານຫົວ	W18	ບ້ານຫ້ວຍສະໜວ
	ທ້ວຍນ້ຳສະອາດສຸກີ	W 6	ບ້ານສະໜວ	W19	ບ້ານທົ່ງເມືອງ
	ເຂດທຸ່ງນາ	W 7	ບ້ານສະໜວ	W20	ບ້ານທົ່ງທຸ່ງ
	ຖະໜົນໃຫ່	W 8	ບ້ານທົ່ງທຸ່ງ	W21	ບ້ານສະໜວ
	ສະຖານີ	W 9	ບ້ານທົ່ງ	W22	ບ້ານທົ່ງ
	ທ້ວຍ	W 10	ບ້ານທົ່ງ	W23	ບ້ານທົ່ງ
	ສະຖານ	W 11	ບ້ານທົ່ງ	W24	ບ້ານສະໜວ
	ທ່າເຮືອ	W 12	ບ້ານ-ສ້ອ	W25	ບ້ານສະໜວ
	ຖະໜົນເສັ້ນໃຫ່ໃນປ່ານ	W 13	ບ້ານທົ່ງ	W26	ບ້ານ


ໝາຍເຫດ:

ສັ່ງລວມຂໍ້ມູນຕ່າງໆ ທີ່ໄດ້ຂຽນອອກມາແລ້ວ ຈຶ່ງສາມາດວາດພາບຂອງຜັງເມືອງນະຄອນຫລວງວຽງຈັນ ດັ່ງທີ່ແຕ້ມອອກມານີ້.


ປະຕູເຂົ້າ ຫໍພະແກ້ວ ລວດລາຍ ແບບຕົ້ນສະບັບຂອງ ສິລະປະກຳ ແຫ່ງອານາຈັກລາວລ້ານຊ້າງໂດຍແທ້



ຮູບຄວັດລາຍຕ່າງໆຂອງ ຫໍພະແກ້ວ ແບບຕົ້ນສະບັບ ຂອງອານາຈັກລາວລ້ານຊ້າງໂດຍແທ້




ລວດລາຍປະດັບຂອບປະຕູ ແລະ ປ່ອງຢ້ຽມຂອງ ຫໍພະແກ້ວ
ແບບຕົ້ນສະບັບ ຂອງສິລະປະກຳ ແຫ່ງອານາຈັກລາວລ້ານຊ້າງໂດຍແທ້.



ปะตูหัพะไตปิกิก อัดโพนพูเมือๆ ที่โพนพิไส แขวางหอๆคาย สร้างโดยเจ้าโพหิสะลาด ปี 1535

(สะแดงให้เห้นรูบถอัดอันงิดงามแห่ง สิละปะลาวโดยแท้)



H.Parmetier

ປະຫວັດຫຍໍ້ຂອງພະບາງ



ພະບາງ ມີຊື່ແທ້ວ່າ: ພະປາງຫ້າມຍາດ ຕໍ່ມາຮ້ອງວ່າ ພະປາງ ແລ້ວມາຮ້ອງກັນວ່າ ພະບາງ.

- ໃນ ພ.ສ 436 (107 ປີ ກ່ອນ ຄ.ສ) ພະຈູຣະນາຄະເຖຣະໄດ້ຫລໍ່ ພະບາງ ທີ່ປະເທດສີລັງກາ ແລ້ວປະດິດສະຖານ ຢູ່ທີ່ນີ້ນານເຖິງ 963 ປີ (ໄດ້ອາຣາທະນາອັດຖິ 5 ອົງ ຂອງພະພຸດທະເຈົ້າ ເຂົ້າໃນພະບາງ)

- ພ.ສ 1400 (ຄ.ສ 857) ເຈົ້າສຸປົນນະຣາດ ແຫ່ງສີລັງກາໄດ້ມອບ ພະບາງ ໃຫ້ແກ່ເຈົ້າແຜ່ນດິນຂະເໝນ ນຳມາປະດິດສະຖານ ໄວ້ທີ່ນະຄອນ ອິນທະປັດ ໄດ້ 502 ປີ.

- ພ.ສ 1902 (ຄ.ສ 1359) ເຈົ້າໄຊຍະວໍຣະມັນ ປະຣະເມສວນ ຊຶ່ງລາວເອີ້ນວ່າ ພະຍາ ສິຣິຈຸນທະຣາດ ຈຶ່ງໄດ້ມອບ ພະບາງ ເປັນຂອງຂວັນໃຫ້ແກ່ ເຈົ້າຟ້າງຸ່ມ ຣາຊບຸດເຂີຍ ເພື່ອນຳມາເຜີຍແຜ່ສາສະໜາພຸດ ທີ່ອານາຈັກລາວລ້ານຊ້າງ (ພະບາງ ໄດ້ມາປະດິດສະຖານ ຢູ່ເມືອງວຽງຄຳ ເປັນເວລາ 143 ປີ.

- ພ.ສ. 2405 (ຄ.ສ 1502) ໄດ້ຍ້າຍໄປປະດິດສະຖານຢູ່ວັດມະໂນລົມ 2 ປີ ແລ້ວຍ້າຍມາໄວ້ທີ່ວັດວິຊຸນມະຫາວິຫານ ເມືອງ ຊຽງທອງ (ຕໍ່ມາເອີ້ນວ່າ ເມືອງ ຫລວງພະບາງ) ພະບາງ ໄດ້ປະດິດສະຖານຢູ່ຫລວງພະບາງ ໄດ້ 202 ປີ ຈຶ່ງໄດ້ຍ້າຍມານະຄອນຫລວງວຽງຈັນ.

- ໃນ ພ.ສ 2248 (ຄ.ສ 1705) ໄດ້ມາປະດິດສະຖານໄວ້ທີ່ວັດອິນແປງ (ຊື່ເກົ່າແມ່ນ ວັດປ່າສັກຫລວງ) ທີ່ນະຄອນວຽງຈັນໄດ້ 74 ປີ.

- ພ.ສ 2322 (ຄ.ສ 1779) ສັກດິນາສະຫຍາມໄດ້ມາຕີນະຄອນວຽງຈັນແລ້ວນຳເອົາ ພະບາງ, ພະແກ້ວມໍຣະກົດ ແລະ ພະແຊກຄຳ ໄປໄວ້ທີ່ກຸງເທບ.

- ພ.ສ 2326 (ຄ.ສ 1783) ສະຫຍາມໄດ້ສົ່ງພະບາງຄືນໃຫ້ແກ່ລາວ, ມາປະທັບຢູ່ທີ່ ວຽງຈັນ 45 ປີ.

- ພ.ສ 2371 (ຄ.ສ 1828) ສັກສິດາສະຫຍາມກໍມາທຳລາຍ ຈູດເຜົ່ານະຄອນວຽງຈັນ ອີກ ແລ້ວນຳເອົາພະບາງ ພະແຊກຄຳ ພະເສົ້າ ພະເສີ່ມ ພະໃສ ແລະ ພະອື່ນໆ ໄປອີກ.

- ພ.ສ 2409 (ຄ.ສ 1866) ສະຫຍາມໄດ້ສົ່ງ ພະບາງ ຄືນໃຫ້ແກ່ລາວເປັນຄັ້ງທີສອງ ຈຶ່ງໄດ້ນຳເມືອປະດິດສະຖານຢູ່ທີ່ວັດວິຊຸນ ມະຫາວິຫານ ເມືອງ ຫລວງພະບາງ ເປັນເວລາ 20 ປີ ແລ້ວຍ້າຍມາໄວ້ວັດໃໝ່ສຸວັນນະພູມ ແລະ ໃນ ຫໍຄຳ ຣາຊວັງຫລວງ ໃນໄລຍະຕໍ່ມາ.

ພະບາງ ແມ່ນພະພຸດທະຮູບອົງສັກສິດ ເປັນຂອງຄ້ຳຄູນບ້ານຄູນເມືອງລາວ ຖືວ່າເປັນມໍ ລະດົກອັນລ້ຳຄ່າຢ່າງໜຶ່ງຂອງປະເທດຊາດ ມາດົນນານ. ມາຮອດນີ້ ພະບາງມີພະຊົນມາຍຸໄດ້ 2116 ປີ. (ພະບາງສູງປະມານ 94 ຊມ ແລະ ໜັກປະມານ 67.6 ກກ).

ໝາຍເຫດ: ຖອດຈາກປຶ້ມຂອງ ຈັນທະພອນ ວັນນະພອນ ວັນນະຈິດ ພິມປີ 2005 ແລະ ໄດ້ສົມທຽບກັບປຶ້ມຕຳນານ ພະບາງຂອງທ່ານ ມະຫາສີລາວີຣະວົງ ພິມທີ່ວຽງຈັນ ພສ 2500 (ຄສ 1967) ແລ້ວ.



ປະຫວັດຫຍໍ້ຂອງພະແກ້ວມໍຣະກົດ

ພະແກ້ວມໍຣະກົດມີຊື່ເດີມວ່າ: ພະມະຫາມະນີຣັດຕະນະ ປະຕິມາກອນ ແກ້ວມໍຣະກົດ.

- ປີ 500 (43 ປີ ກ່ອນ ຄ.ສ) ພະມາຄະເສນເຖຣະ ທີ່ເມືອງ ປາຕາລິບຸດ ແຫ່ງປະເທດ ອິນເດຍ ເປັນຜູ້ສ້າງ ພະ ແກ້ວມໍຣະກົດ ອົງນີ້ຂຶ້ນມາໂດຍອາຣາທະນາອັດຖິ 7 ອົງ ຂອງພະພຸດທະເຈົ້າ ເຂົ້າໃນຕົວຂອງພະອົງ. ພະແກ້ວມໍຣະ ກົດ ໄດ້ປະດິດສະຖານຢູ່ແຫ່ງນີ້ນານ 300 ປີ.

- ປີ 800 (ປີ 247) ເນື່ອງຈາກວ່າ ເມືອງ ປາຕາລິ ບຸດ ບໍ່ມີຄວາມສະຫງົບ ຜູ້ທີ່ເຫລື້ອມໃສຕໍ່ພະອົງ ກໍໄດ້ອັງ ເຊີນມາໄວ້ທີ່ປະເທດ ສີລັງກາ ຢູ່ນານ 200 ປີ.

- ຕໍ່ມາເຈົ້າຂັດຕິຍະສີຣາມະວົງແຫ່ງສີລັງກາ ໄດ້ມອບພະແກ້ມໍຣະກົດ ໃຫ້ແກ່ເຈົ້າແຜ່ນ ດິນພະມ້າ ແຕ່ເວລາເດີນທາງມາເຮືອສຳເພົາ ເລີຍຖືກລົມພະຍຸພັດເຂົ້າໃສ່ ເຮັດໃຫ້ຊັບສົມບັດ ດັ່ງກ່າວ ມາຕົກທີ່ ເມືອງ ອິນທະປັດ ປະເທດ ກຳພູຊາ, ໃນຕໍ່ມາ ເມືອງ ອິນທະປັດ ໄດ້ເກີດມີ ເຫດການນ້ຳຖ້ວມ ຈຶ່ງໄດ້ເສຍ ພະແກ້ວມໍຣະກົດ ນັ້ນໄປ. ມີພະເຖຣະສະຫຍາມອົງໜຶ່ງ ເກັບໄດ້ ກໍເລີຍນຳ ພະແກ້ວມໍຣະກົດ ໄປຖວາຍເຈົ້າ ອະຕິກະ ແຫ່ງເມືອງ ສີອະຍຸທະຍາ, ຢູ່ບໍ່ນານກໍຍ້າຍ ມາເມືອງ ກຳແພງເພັດ, ຢູ່ບໍ່ນານກໍຍ້າຍມາຢູ່ເມືອງ ລະໂວ້ (ລົບບຸລີ) 1 ປີ ກັບ 9 ເດືອນ ແລ້ວ ກໍຍ້າຍຄືນມາໄວ້ກຳແພງເພັດອີກຄັ້ງໜຶ່ງ. (ຂະໜາດຂອງ ພະແກ້ວມໍຣະກົດ: ໜ້າຕັກກ້ວາງ 48, 3 ຊມ ສູງ 66 ຊມ).

- ຕໍ່ມາເຈົ້າພິມມະທັດ ແຫ່ງເມືອງ ຊຽງຮາຍ ເມື່ອຊາບເຖິງພະຄຸນຂອງ ພະແກ້ວມໍຣະກົດ ແລ້ວກໍນໍາທັບລົງໄປຂໍເອົາ ພະແກ້ວມໍຣະກົດ ມາໄວ້ທີ່ເມືອງຊຽງຮາຍ ຢູ່ທີ່ນີ້ນານຈົນເຖິງ ປີ ພ.ສ 1977 (ປີ 1434).

- ພ.ສ 1977 - 2009 (ປີ 1434 - 1466) ພະແກ້ວມໍຣະກົດ ໄດ້ນໍາມາປະດິດສະຖານຢູ່ເມືອງ ລໍາປາງ ໂດຍບັງເອີນນານເຖິງ 32 ປີ ຈາກນັ້ນ ກໍໄດ້ອັງເຊີນໄປເມືອງຊຽງໃໝ່.

- ປີ ພ.ສ 2009 - 2093 (ປີ 1466 - 1550) ພະແກ້ວມໍຣະກົດ ໄດ້ມາປະທັບຢູ່ນະຄອນຊຽງໃໝ່ ເປັນເວລາ 84 ປີ ຈົນເຈົ້າໄຊເຊດຖາທິຣາດ ໄດ້ນໍາລົງມານະຄອນຫລວງພະບາງ ເພື່ອທໍາບຸນກຸສົນ ເຖິງພະບິດາພະໂພທິສະລາດ ທີ່ໄດ້ສະຫວັນຣະຄົດ.

- ປີ ພ.ສ 2093 - 2103 (ປີ 1550 - 1560) ພະແກ້ວມໍຣະກົດ ໄດ້ມາປະທັບຢູ່ນະຄອນຫລວງພະບາງ ເປັນເວລາ 10 ປີ ແຕ່ເຫັນວ່າບໍ່ປອດໄພ ຍ້ອນການກໍກວນຂອງພະມ້າ ຈຶ່ງ ໄດ້ອັງເຊີນລົງມານະຄອນວຽງຈັນ.

- ປີ ພ.ສ 2103 - 2322 (ປີ 1560 - 1779) ພະແກ້ວມໍຣະກົດ ໄດ້ມາປະທັບຢູ່ ນະຄອນຫລວງວຽງຈັນ ເປັນເວລາ 219 ປີ ຈຶ່ງຖືກສະຫຍາມປຸ້ນເອົາໄປໄວ້ກຸງເທບ.

- ປີ ພ.ສ 2322-2552 (ປີ 1779-2009) ພະແກ້ວມໍຣະກົດ ປະທັບຢູ່ກຸງເທບມາຮອດ ນີ້ ເປັນເວລາ 230 ປີ ພໍດີ. ມາຮອດປີນີ້ ລວມພະຊົນມາຍຸໄດ້ 2060 ປີ (ຂໍ້ມູນທັງໝົດນີ້ໄດ້ ມາຈາກໜັງສືໃບລານຂອງຫໍສະໝຸດແຫ່ງຊາດ ແລະ ຕໍານານພະແກ້ວມໍຣະກົດ ຊຽນໂດຍ ດວງ ໄຊ ຫລວງພະສີ ປີ 2006).

ແຕ່ປີ 1560 ເຖິງ 1882 ມີໃຜແດ່ ປົກຄອງອານາລາວຈັກລ້ານຊ້າງ.

- 1550 - 1572 ເຈົ້າ ໄຊເຊດຖາ, ປົກຄອງ 22 ປີ ແລ້ວເສຍຊີວິດໄປ ໂດຍບໍ່ຊາບສາເຫດພຽງອາຍຸ 38 ປີ.

- 1573 - 1575 ແສນສຸລິນ ເຈົ້າຄອງນະຄອງວຽງຈັນ ຂຶ້ນເປັນເຈົ້າແຜ່ນດິນ.

- 1575 - 1580 ເຈົ້າ ວໍລະວົງສາ ນ້ອງຊາຍ ເຈົ້າ ໄຊເຊດຖາ (ເວລານີ້ຂຶ້ນກັບພະມ້າ).

- 1575 -1578 ມີຂະບວນການກູ້ຊາດຂອງຄູຈານຫູຍາວ(ອັດຕະປື)ຕໍ່ສູ້ເອົາເອກະລາດ.

- 1580 - 1582 ພະມ້າ ນໍາເອົາ ແສນສຸລິນ ກັບມາປົກຄອງວຽງຈັນຄືນ.

- 1583 -1590 ວຽງຈັນ ບໍ່ມີກະສັດປົກຄອງເປັນເວລາ 7 ປີ .

- 1591 -1596 ພະໜໍ່ເມືອງ ລູກຊາຍເຈົ້າ ໄຊເຊດຖາ ຂຶ້ນປົກຄອງແລ້ວເສຍຊີວິດ ໃນໄວໜຸ່ມ.

- 1598 - 1600 ພະວໍລະປັຕາ (ພໍ່ເຖົ້າຂອງພະໜໍ່ຄໍາ) ຂຶ້ນປົກຄອງແທນ.

- 1600 - 1622 ເຈົ້າ ວໍລະວົງສາ ທຳມີກະລາດ ຂຶ້ນຄອງບັນລັງແທນພໍ່ (ພະວໍລະປີຕາ) ແລ້ວປະກາດເອກະລາດ ບໍ່ຂຶ້ນກັບພະມ້າ.

- 1624 -1627 ບັນດິດໂພທິສະລາດ ປົກຄອງ.

- 1627-1638 ພະມ່ອມແກ້ວ ລູກຊາຍ ເຈົ້າ ວໍລະວົງສາ ປົກຄອງ.

- 1638 -1690 ເຈົ້າ ສຸລິຍະວົງສາ ປົກຄອງປະເທດໄດ້ 52 ປີ ອານາຈັກລ້ານຊ້າງ ມີສັນຕິພາບ ເອກະລາດ ແລະ ຮຸ່ງເຮືອງເຫລືອງເຫລື້ອມທີ່ສຸດ ຈົນວ່າຄົນລາວທັງຫລາຍຍ້ອງວ່າ ແມ່ນ " ຍຸກຄຳ " ຂອງລາວ. ພະອົງເສຍຊີວິດອາຍຸ 82 ປີ.

- 1690 ພະຍາຫລວງເມືອງຈັນຢຶດອຳນາດແລ້ວຂຶ້ນເປັນເຈົ້າແຜ່ນດິນ ອານາຈັກລ້ານຊ້າງ ກໍຖືກແບ່ງອອກເປັນ 3 ອານາຈັກຄື: ອານາຈັກຫລວງພະບາງ, ອານາຈັກວຽງຈັນ ແລະ ອານາຈັກຈຳປາສັກ.

1695 -1893 ສັກດິນາລາວແຕກແຍກກັນ.

*** ຢູ່ຫລວງພະບາງ:**

- 1695 -1712 ເຈົ້າ ກິ່ງກິດສະລາດ ປະກາດບໍ່ຂຶ້ນກັບວຽງຈັນ.
- 1723 -1749 ເຈົ້າ ອິນທະສົມ ປົກຄອງ.
- 1750 -1771 ເຈົ້າ ໂຊຕິກະ
- 1772 -1791 ເຈົ້າ ສຸຣິຍະວົງ
- 1792 -1817 ເຈົ້າ ອະນຸຣຸດທະ
- 1818 -1836 ເຈົ້າ ມັນທາຕຸລາດ
- 1838 -1850 ເຈົ້າ ສຸຂະເສີມ.
- 1852 -1871 ເຈົ້າ ຈັນທະຣາດ
- 1872 -1889 ເຈົ້າ ອຸ່ນຄຳ
- 1889 - 1904 ເຈົ້າ ຄຳສຸກ (ເຈົ້າ ສັກກະລິນ).
- 1905 - 1919 ເຈົ້າ ສີສະຫວ່າງວົງ.
- 1919 - 1975 ເຈົ້າ ສີສະຫວ່າງວັດທະນາ

*** ຢູ່ວຽງຈັນ:**

- 1690 -1694 ເຈົ້າ ອົງຫລໍ ຂຶ້ນປົກຄອງວຽງຈັນ.
- 1695 - 1698 ເຈົ້າ ນັນທະລາດ ຂຶ້ນປົກຄອງ.

- 1698 -1730 ເຈົ້າ ໄຊອິ່ງເວ້ (ພະໄຊເຊດຖາທີ 2) ປົກຄອງ 32 ປີ (ນຳເອົາ ພະບາງລົງມາວຽງຈັນ).

- 1730 -1780 ເຈົ້າ ອິ່ງບຸນ (ເຈົ້າ ສິຣິບຸນຍະສານ) ຂຶ້ນປົກຄອງ.

- 1780 ສະຫຍາມຕີ ວຽງຈັນ ຄັ້ງທີ 1 (ເອົາພະແກ້ວ ແລະ ພະບາງໄປ) ອານາຈັກລ້ານຊ້າງ ທັ່ງໝົດກາຍເປັນເມືອງຂຶ້ນກັບສະຫຍາມ.

- 1780 - 1793 ເຈົ້າ ນັນທະເສນ ປົກຄອງວຽງຈັນ ທີ່ຂຶ້ນກັບສະຫຍາມ.

- 1795 -1803 ເຈົ້າ ອິນທະວົງ.

- 1803 -1827 ເຈົ້າ ອະນຸວົງ ຫລື ພະໄຊເຊດຖາ ທີ 3 ຂຶ້ນປົກຄອງວຽງຈັນ ແຕ່ກູ້ເອກະລາດ ບໍ່ສຳເລັດ ກໍເລີຍຖືກສັກດິນາສະຫຍາມຈັບໄປຂັງໃສ່ຄອກເຫລັກໄວ້ທັ່ງໝົດຄອບຄົວ ແລ້ວທຳການປະຈານ ແລະ ທໍລະມານຢ່າງໂຫດຫ້ຽມ ດ້ວຍເຄື່ອງມືທີ່ປ່າເຖື່ອນທີ່ສຸດ ທີ່ປາກນ້ຳເຈົ້າພະຍາ (ກຸງເທບ) ຕາກແດດຕາກຝົນໄວ້ໂດຍບໍ່ໄດ້ຮັບນ້ຳ ແລະ ອາຫານຢ່າງພຽງພໍເຖິງເຈັດມື້ເຈັດຄືນ, ທ້ານບໍ່ໄຫວພະອົງກໍເລີຍສິ້ນພະຊົນໄປຢ່າງໜ້າອະນາດ ໃນມື້ແຮມ 6 ຄ່ຳ ເດືອນ ຍີ່ ປີ ກັດເປົ້າ (ສະຫລຸ) ປີ 1829. ສ່ວນພະຊາຍາ ຣາຊະບຸດ ຣາຊະທິດາ ພ້ອມດ້ວຍເຊື້ອພະວົງ ທຸກພະອົງ ກໍຖືກສະຫຍາມ ດູໝິ່ນ ຫຍຽບຫຍາມ ແລະ ທາທາງກຳຈັດໄປຈົນໝົດ.

ສ່ວນເຈົ້າຣາຊະວົງ ລູກຊາຍກົກ ແລະ ທັ່ງເປັນແມ່ທັບໃຫຍ່ຂອງພະອົງນັ້ນ ພາຍຫລັງທີ່ບຸກເຂົ້າແທ່ງພະຍາບໍດົນຈອມທັບໃຫຍ່ ຂອງສະຫຍາມ ຈົນຖືກບາດເຈັບຢ່າງສາຫັດ ແລ້ວກໍເອົາງ້າວຟັນຄໍແມ່ທັບສະຫຍາມ ອີກຜູ້ໜຶ່ງຕາຍຄາທີ່ ກໍເລີຍຖືກທະຫານສະຫຍາມ ຍິງປືນໃສ່ທາງຫລັງ ສະຫລົບໄປ ເມື່ອຮູ້ເມື່ອຄິງແລ້ວກໍຟ້າວຂຶ້ນມ້າປົບໜີມາປ້ອງກັນເມືອງວຽງຈັນ. ເມື່ອເມືອງວຽງຈັນແຕກແລ້ວ ພະອົງ ກໍໜີໄປຕາມພະບິດາ ທີ່ພາຄອບຄົວໜີໄປກ່ອນແລ້ວ, ກອງທັບສະຫຍາມ ໄດ້ໄລ່ຕາມແຕ່ຈັບພະອົງບໍ່ໄດ້, ບໍ່ຊາບວ່າພະອົງໄດ້ຫາຍສາບສູນຢູ່ທີ່ໃດ? ແນ່ນອນ ແມ່ທັບ ຜູ້ເດັດດ່ຽວອາດຫານຄືແນວນີ້ ຄົງຈະບໍ່ຍອມໃຫ້ສັດຕູຈັບໄດ້ງ່າຍ. ຕໍ່ຈາກນັ້ນມາ ອານາຈັກວຽງຈັນກໍບໍ່ມີກະສັດປົກຄອງຕໍ່ເລີຍ. ໃນທີ່ສຸດ, ນະຄອນຫລວງວຽງຈັນ ທີ່ເຄີຍເປັນ ຣາຊະທານີອັນຮຸ່ງເຮືອງຂອງອານາຈັກລ້ານລາວຊ້າງ ມາໄດ້ 268 ປີ ກໍຖືກກອງທັບສະຫຍາມທຳລາຍ ແລະ ຈູດເຜົາຈົນກ້ຽງ.

*** ຢູ່ຈຳປາສັກ:**

- 1770 -1774 ບໍ່ມີກະສັດ ແຕ່ໃຫ້ພະຄູແກ້ວປົກຄອງແທນ.

- 1714 -1738 ເຈົ້າໜໍ່ກະສັດ (ເຈົ້າສ້ອຍສີສະມຸດ)

- 1739 -1791 ເຈົ້າໄຊຍະກຸມມານ ປົກຄອງ ແລະ ຂຶ້ນກັບສະຫຍາມ.

- 1791 -1807 ພະວໍໄຊ ຂັນຕິຍະວົງສາ.
- 1819 -1827 ເຈົ້າຣາຊບຸດໂຍ້.
- 1828 -1841 ເຈົ້າຮຸ່ຍ.
- 1841 - 1851 ເຈົ້ານາກ.
- 1855 - 1859 ເຈົ້າຍຸຕິທັມມະທອມ (ຄຳໃຫຍ່).
- 1862 - 1901 ເຈົ້າຍຸຕິທັມມະທອມ (ຄຳສຸກ).

ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່ານະຄອນວຽງຈັນ ໄດ້ມີປະຫວັດຕິດພັນ ກັບພະທາດຫລວງ ກວ່າ 600 ປີແລ້ວ ແລະ ການພັດທະນານະຄອນວຽງຈັນ ກໍຕິດພັນກັບຄວາມສຶວິໄລຈາກອິນເດຍ, ກຳປູເຈຍ -ຂະເໝນ (ຂອມ), ມຽນມາ, ສະຫຍາມ ແລະ ຈີນຕະຫລອດມາ, ແຕ່ສິ່ງສຳຄັນທາງ ດ້ານຊີວິດຈິດໃຈ ຂອງຊາວວຽງຈັນບູຮານ ແມ່ນຖືສາສະໜາພຸດເປັນຫລັກ ປົນເປກັບຮີດຄອງ ປະເພນີຂອງພາມ,ແຕ່ຄົນລາວມີສົມທຳປະຈຳໃຈ, ມີນິດໃສອ່ອນຫວານ, ຈິດໃຈກວ້າງຂວາງ, ມັກຄວາມສະຫງົບ, ບໍ່ມັກໄປຮຸກຮານຜູ້ອື່ນ, ຢູ່ໃນສົມກົມໃນທຳແທ້. ປະຊາຊົນວຽງຈັນ ສ່ວນ ຫລາຍແມ່ນຕັ້ງບ້ານເຮືອນຢູ່ຕາມແຄມຂອງ ແລະ ອີກສ່ວນໜຶ່ງຕັ້ງບ້ານເຮືອນຢູ່ຕາມທົ່ງນາ, ຮ້ອສວນ ຢ່າງກະແຈກກະຈາຍ. ແຕ່ລະບ້ານແມ່ນ ໄດ້ສາມັກຄີກັນສ້າງວັດໜຶ່ງ ຫລື ຫຼາຍກວ່ານັ້ນ ຕາມໃຈໃສສັດທາ ຈົນຍືນຍົງຄົງຕົວມາເຖິງປະຈຸບັນນີ້.

ເມືອງວຽງຈັນບູຮານ ໄດ້ຮັບການພັດທະນາ ມາແຕ່ລະຍຸກສະໄໝແຕກຕ່າງກັນ ເຊັ່ນ: ມີ ໄລຍະສະຫງົບ ແລະ ສວຍງາມ ຈົນເອີ້ນວ່າ ຍຸກຄຳ ແລະ ມີໄລຍະວຸ້ນວາຍແຕກແຍກຊຸດໂຊມ ຈົນເຖິງຂັ້ນຕົກເປັນຫົວເມືອງສ່ວຍ ແລະ ເມືອງຂຶ້ນໃຫ້ແກ່ສັກດິນາຕ່າງຊາດເປັນເວລາດົນນານ, ນັ້ນກໍເນື່ອງຈາກວ່າ ຍ້ອນປະເທດຊາດຖືກແບ່ງອອກເປັນ 3 ອານາຈັກ ດ້ວຍຄວາມບໍ່ຖືກຕ້ອງ ປອງດອງກັນຂອງສັກດິນາລາວໃນສະໄໝນັ້ນ. ເຖິງວ່າເຫດການຕ່າງໆ ຂອງເມືອງວຽງຈັນ ແຕ່ ກຳເນີດ ມາເຖິງປີ 1779 ຈະບໍ່ໄດ້ບັນທຶກໄວ້ຢ່າງລະອຽດຄົບຖ້ວນກໍຕາມ ແຕ່ກໍມີຄວາມສາມາດ ເລົ່າຄືນໄດ້ບາງຂັ້ນຕອນທີ່ສຳຄັນ ຊຶ່ງສາມາດຢັ້ງຢືນໄດ້ເຖິງການພັດທະນາ ເມືອງວຽງຈັນ ຂອງ ບັນພະບູຣຸດ ບາງວິລະກະສັດ ແລະ ປະຊາຊົນ ຊາວວຽງຈັນໄວ້ໄດ້ ເປັນແຕ່ລະໄລຍະຕໍ່ເນື່ອງ ກັນມາ.

ພາກທີ່ສອງ

ນະຄອນຫລວງວຽງຈັນ ໃຕ້ການຍຶດຄອງ ຂອງສັກດິນາສະຫຍາມ

(ປີ 1779 ເຖິງປີ 1893).

I. ສະພາບແວດລ້ອມ ກ່ອນສັກດິນາສະຫຍາມ ຕີຢຶດເອົາ ນະຄອນຫລວງ ວຽງຈັນ.

ສະພາບແວດລ້ອມຂອງໂລກ - ພາກພື້ນ ແລະ ໃນແຫລມ ສຸວັນນະພູມ ໃນໄລຍະກ່ອນ ແລະ ຫລັງ 1779 ມີຈຸດເດັ່ນດັ່ງນີ້:

ພວກຈັກກະພັດຕາເວັນຕົກ ເວົ້າລວມ, ຈັກກະພັດລ່າເມືອງຂຶ້ນຝຣັ່ງ ເວົ້າສະເພາະ ໄດ້ມີ ນະໂຍບາຍ ແບ່ງກັນລ່າອານານິຄົມ ເອົາປະເທດອື່ນໃນອາຟຣິກາ, ອາຊີ ເປັນຫົວເມືອງຂຶ້ນຂອງ ພວກເຂົາ. ຝຣັ່ງ, ພາຍຫລັງຢຶດເອົາບາງປະເທດ ໃນອາຟຣິກາ ແລ້ວກໍຈ້ອງມອງ ແລະ ກຽມຈະ ຢຶດເອົາບັນດາປະເທດໃນອາຊີອາຄະເນ ເຊັ່ນ: ຫວຽດນາມ, ກຳປູເຈຍ ແລະ ລາວເຮົາ. ສ່ວນຈັກ ກະພັດອັງກິດ ກໍເລີ່ມຢຶດເອົາບາງຕອນໃນອິນເດຍ, ເອົາພະມ້າ, ປະເທດສະຫຍາມ ແລະ ອື່ນໆ. ພວກເຂົາໄດ້ສົ່ງນັກສຶບ ສອດແນມເຂົ້າມາບັນດາປະເທດ ໃນແຫລມອິນດູຈີນ, ເລີ່ມແຕ່ຕົ້ນສະ ຕະວັດທີ XVIII ດ້ວຍຫລາຍຮູບການ ເຊັ່ນ: ເປັນນັກເຜີຍແຜ່ສາສະໜາ, ນັກທຸລະກິດ, ນັກຄົ້ນ ຄວ້າຊີວະວິທະຍາ.

ສັກດິນາສະຫຍາມ, ພະມ້າ, ດ້າຍຫວຽດ, ຈີນ ກໍມີຈຸດປະສົງແຜ່ຂະຫຍາຍອານາເຂດ ແລະ ຢຶດເອົາປະເທດອ້ອມຂ້າງເປັນເມືອງສ່ວຍ ຫລື ເມືອງຂຶ້ນຂອງຕົນ. ເປັນຕົ້ນແມ່ນສັກດິນາ ສະຫຍາມ ເວລາໃດກໍລ້ຽງຄວາມຫວັງຢຶດເອົາປະເທດອ້ອມຂ້າງ ເຊັ່ນ: ປະເທດລາວລ້ານຊ້າງ ແລະ ກຳປູເຈຍ.

ສະເພາະໃນປະເທດລາວລ້ານຊ້າງ, ພາຍຫລັງ ເຈົ້າຟ້າງຸ່ມ ທ້ອນໂຮມບັນດາອານາຈັກ ນ້ອຍໃຫຍ່ ເຂົ້າເປັນອານາຈັກລາວລ້ານຊ້າງ ເອກະພາບແລ້ວ, ພະອົງເອງ, ເຈົ້າໄຊເຊດຖາທິ ລາດ, ເຈົ້າ ສຸລິຍະວົງສາ ກໍສືບຕໍ່ປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ເປັນອານາຈັກ ທີ່ຮຸ່ງເຮືອງສີວິໄລ ທັງຂະຫຍາຍຕົວ ກ່ວາອານາຈັກອ້ອມຂ້າງ ເມື່ອສິ້ນລັດຊະການ ເຈົ້າ ສຸລິຍະ ວົງສາທຳມິກະລາດ ແລ້ວ, ອານາຈັກລາວລ້ານຊ້າງ ຊຶ່ງເຄີຍເປັນປຶກແຜ່ນ ໝັ້ນຄົງມາຕັ້ງແຕ່ລັດ ຊະການ ພະຍາ ຟ້າງຸ່ມ ມະຫາລາດ ກໍເລີ່ມມີຮອຍແຕກແຍກກັນພາຍໃນແດ່ເລັກນ້ອຍ ຊຶ່ງກໍຖື ເປັນທຳມະດາ ໃນເມື່ອມີອານາເຂດກວ້າງໃຫຍ່ປົກຄອງ ແລະ ຂາດຄວາມເຂັ້ມແຂງພາຍໃນ. ອີກດ້ານໜຶ່ງ, ບັນດາອານາຈັກອ້ອມຂ້າງກໍເລີ່ມຖືກຄຸຄາມ ໂດຍພວກຕາເວັນຕົກ ທີ່ຊອກຫາລ່າ ເມືອງຂຶ້ນມາເລື້ອຍໆ. ຍ້ອນສະພາບແວດລ້ອມຄືແນວນັ້ນ, ອານາຈັກລາວລ້ານຊ້າງ ກໍຖືກກະ ແສອິດທິພົນພາຍນອກຍຸແຍ່ ບັດດາກະສັດພາຍໃນອີກ, ເປັນຕົ້ນ ແມ່ນພວກສັກດິນາສະຫຍາມ ແລະ ດ້າຍຫວຽດ. ໃນຕົ້ນປີ 1700 ຊ່ວຍກັນປົກປັກຮັກສາ ປະເທດລາວ ລ້ານຊ້າງ ອັນກວ້າງ ໃຫຍ່ໃຫ້ຢູ່ລອດ, ບັນດາສັກດິນາພີ່ນ້ອງທ້ອງຖິ່ນຂອງລາວ ຊຶ່ງມີ ເຈົ້າ ກົ່ງກິດສະລາດ ປົກຄອງ

ແຄ້ນ ຫລວງພະບາງ ເມື່ອປີ 1707, ເຈົ້າ ໄຊອົງເວ້ (ຫລື ເຈົ້າ ໄຊເຊດຖາທິລາດ II) ປົກຄອງ ແຄ້ນ ວຽງຈັນ ປີ 1700 ແລະ ເຈົ້າ ສ້ອຍ ສີສະໝຸດ ພຸດທາງກຸນ ປົກຄອງແຄ້ນ ຈຳປາສັກ ປີ 1714. ແຕ່ແທນທີ່ຈະແຍກເພື່ອຮັກສາທ້ອງຖິ່ນໄດ້ສະດວກ ແລະ ເລີກຊິ່ງຂັ້ນດີກວ່າເກົ່າ, ພັດ ຖືກສັກດິນາສະຫຍາມຍຸແຍ່ " ຕອກຫລິ້ມ " ເຂົ້າຊ້ຳ ເພື່ອສວຍໂອກາດ ແບ່ງແຍກສັກດິນາທ້ອງ ຖິ່ນ ໃຫ້ອ່ອນກຳລັງແນໃສ່ກຳທັງສາມ " ພູດ " ເພື່ອໄດ້ຮັບບັນນາການຫລາຍກວ່າ " ພູດດຽວ " ຈາກຜູ້ດຽວ, ທັງເຮັດໃຫ້ອານາຈັກລາວລ້ານຊ້າງອັນກວ້າງໃຫຍ່ ໃນເມື່ອກ່ອນຂະຫຍາຍຕົວແລະ ເຂັ້ມແຂງ, ແຍກກັນອອກເປັນສາມອານາຈັກ ແຂ່ງດີ ແຂ່ງເດັ່ນກັນ, ຖືກກັບຄຳບູຮານຂອງລາວ ວ່າ: " ຈັບຊ້າງເຂົ້າເຮືອນ, ຈັບເສືອເຂົ້າບ້ານ " ນັ້ນເອງ. ໃນສະໄໝນີ້ ຈຶ່ງຖືເປັນບົດຮຽນຕໍ່ໄປອີກ. ແຕ່ຕໍ່ມາໃນປີ 1700 ຍ້ອນການຍາດຊິງກັນຂຶ້ນຄອງອຳນາດຢູ່ພາຍໃນ ແລະ ຍ້ອນການຍຸແຍ່ ຂອງອານາຈັກອ້ອມຊ້າງໃກ້ຄຽງ ຈຶ່ງພາໄປເຖິງບ່ອນ ເຮັດໃຫ້ອານາຈັກລາວລ້ານຊ້າງ ອັນກວ້າງ ໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງໃນເມື່ອກ່ອນ ແຍກກັນອອກເປັນ 3 ອານາຈັກລາວລ້ານຊ້າງ ຄື: ຫລວງພະບາງ, ວຽງຈັນ ແລະ ຈຳປາສັກ. ແຕ່ລະອານາຈັກ ກໍເປັນເອກະລາດພໍໃຜພໍມັນ, ອັນເປັນສາຍເຫດ ເຮັດໃຫ້ອານາຈັກລາວລ້ານຊ້າງ ອ່ອນເພຍລົງ ແລະ ຖືກສັກດິນາຕ່າງຊາດ ບຸກຕີຍຶດເອົາໄດ້ໂດຍງ່າຍ.

1. ສັກດິນາສະຫຍາມ ຂະຫຍາຍອານາເຂດ

ສະຫຍາມໃນເວລານັ້ນ ນັບວ່າເປັນປະເທດ ທີ່ມີເລ່ຫລ່ຽມ ແລະ ສະມັດທະພາບສູງສົມ ຄວນ ຢູ່ໃນແຫລມອິນດູຈີນ, ບໍ່ວ່າທາງດ້ານເສດຖະກິດ, ການທະຫານ ແລະ ທັງມີອານາເຂດທີ່ ຕົນຄອບງຳຄຸ້ມຄອງກວ້າງຂວາງ, ການຈັດຕັ້ງບັງຄັບບັນຊາກໍຄືທາງດ້ານກຳລັງຮຸກຮານ ກໍເຂັ້ມ ແຂງຄວາມລຳລອຍ ທີ່ໄດ້ມາຈາກການຍຶດຊັບສົມບັດຈາກອານາຈັກ ແລະ ບັນດາເມືອງຕ່າງໆ ທີ່ຕົນຍົກກຳລັງໄປປາບປາມໄດ້, ໄດ້ຈາກການເກັບພາສີຕົວເລກ ນຳປະຊາຊົນ ບັນດາຊົນຊາດ, ຈາກເຄື່ອງລາຊະບັນນາການ ທີ່ເຈົ້າປະເທດສະລາດທັງຫຼາຍ ນຳໄປຖວາຍ. ດັ່ງນັ້ນ, ພະຍາ ຕາກສິນ ຈຶ່ງສາມາດຈັດຊື້ອາວຸດຍຸດທະພັນ ທີ່ທັນສະໄໝ ຈາກພໍ່ຄ້າຊາວຕາເວັນຕົກ ມາຮັບໃຊ້ ໃນກອງທັບ ຈ້າງຊາວຕາເວັນຕົກ ມາຝຶກທະຫານ ແລະ ປັບປຸງກຳລັງທັບຕາມແບບຕາເວັນຕົກ. ຍ້ອນມີທ່າແຮງຄືດັ່ງກ່າວນັ້ນ ສົມທົບກັບກາລະໂອກາດທີ່ເໝາະສົມ ພະຍາ ຕາກສິນ ຈຶ່ງຮີບຈູດ ຂະບວນໄຟສົງຄາມຮຸກຮານ ເຂົ້າມາໃນອານາຈັກລາວລ້ານຊ້າງ ເພື່ອຍຶດເອົາອານາຈັກໃກ້ຄຽງ ແລະ ຂະຫຍາຍອານາເຂດຂອງຕົນ ຢ່າງບໍ່ມີເຫດຜົນອັນໃດເລີຍ.

2. ອານາຈັກລາວລ້ານຊ້າງ ຖືກແຕກແຍກ ອອກເປັນ 3 ແຄວ້ນ.

ແນວຄິດຂະຫຍາຍອານາຈັກຂອງສະຫຍາມ ເປັນນະໂຍບາຍພື້ນຖານຂອງເຂົາ ມາແຕ່ດົນນານແລ້ວ. ພໍເຫັນອານາຈັກລາວລ້ານຊ້າງ ກຳລັງຖືກແບ່ງແຍກ ອອກເປັນ 3 ອານາຈັກປົກຄອງຕົນເອງດັ່ງນີ້, ສະຫຍາມ ຈຶ່ງຟ້າວສວຍໂອກາດໃຊ້ສະພາບການນີ້ໂດຍໄວ ເພື່ອບຸກຕີ ແລະ ຢຶດຄອງອານາຈັກລາວລ້ານຊ້າງວຽງຈັນກ່ອນ. ອີກປະການໜຶ່ງ, **ຕາກສິນ ແຫ່ງກຸງສີອາຍຸທະຍາ** ກໍຊອກເລື່ອງບໍ່ພໍໃຈ ຕູ່ຫາວ່າ **ເຈົ້າ ສິລິບຸນຍະສານ** ແຫ່ງອານາຈັກລາວລ້ານຊ້າງ ວຽງຈັນ ໄປຮ່ວມມືກັບສັກດິນາພະມ້າ ເພື່ອບຸກໂຈມຕີ ກຸງສີອາຍຸທະຍາ ໃນປີ 1767. ດັ່ງນັ້ນ, ເຈົ້າຊີວິດສະຫຍາມ ຈຶ່ງແຕ່ງຕັ້ງໃຫ້ພະຍາກະສັດເສິກ ເປັນແມ່ທັບໃຫຍ່ ບຸກຕີເຂົ້າລາວ ໂດຍເລີ່ມແຕ່ທາງພາກໃຕ້ ຂຶ້ນມາ ແລະ ຢຶດເອົານະຄອນຈຳປາສັກ ກ່ອນແລ້ວ ຈຶ່ງຢຶດເອົານະຄອນວຽງຈັນ. ທັງສອງກໍໄດ້ຕົກເປັນຫົວເມືອງສ່ວຍ ໃຫ້ແກ່ສະຫຍາມ.

3. ຄວາມອິດສາຊຶ່ງກັນ ແລະ ກັນໃນວົງກະສັດລາວດ້ວຍກັນ ຍ້ອນການຍຸແຍ່ພາຍນອກ.

ແນວຄິດອິດສາ ບັ້ງບຽດຢຽດແຄ້ນ ແລະ ຍາດຊິງຄວາມເປັນໃຫຍ່ ໃນວົງກະສັດຂອງລາວ ໄດ້ແກ່ຍາວມາຫລາຍຍຸກຫລາຍສະໄໝແລ້ວ, ທັງເປັນຊ່ອງຫວ່າງໃຫ້ສັກດິນາພາຍນອກມາປັ່ນປ່ວນ, ຍຸແຍ່ແລ້ວໂດດເຂົ້າມາຢຶດຄອງ ເຮັດໃຫ້ຜືນແຜ່ນດິນຂອງເຊື້ອຊາດລາວ ທີ່ເຕີບໃຫຍ່ເຂັ້ມແຂງຈະເລີນຮຸ່ງເຮືອງ ມາແຕ່ກ່ອນນັ້ນອ່ອນເພຍ. ສັກດິນາປົກຄອງ ຈຶ່ງມັກມີການປ່ຽນແປງ, ສູນເສຍເອກະລາດ, ແບ່ງແຍກອອກເປັນເຂດປົກຄອງຕົນເອງຫລາຍເຂດ ແຕ່ລະເຂດກໍເປັນເມືອງສ່ວຍຂອງສະຫຍາມ ແລະ ເຮັດໃຫ້ອານາຈັກລ້ານຊ້າງ ທີ່ກວ້າງໃຫຍ່ໄພສານ ທັງເຂັ້ມແຂງ, ດົງດັງໄປເຖິງເອີຣົບ ແລະ ສັກດິນາອ້ອມຂ້າງກໍເກງຂາມນັ້ນ ໄດ້ແຕກເປັນສາມສ່ຽງ ຍ້ອນແຕກແຍກຄວາມສາມັກຄີ ແລະ ຍາດຊິງກັນເປັນໃຫຍ່. ນັ້ນຄືສາຍເຫດສຳຄັນເຮັດໃຫ້ຊາດລາວເສຍເອກະລາດ, ເສຍດິນແດນພາກສ່ວນໜຶ່ງທີ່ຮັ່ງມີ ໃຫ້ແກ່ສະຫຍາມ ເປັນເວລາກວ່າໜຶ່ງສະຕະວັດ.

ເປັນອັນວ່າ ແຜ່ນດິນລາວທີ່ແຕກແຍກກັນອອກ ເປັນ 3 ອານາຈັກນັ້ນ ໄດ້ຕົກເປັນເມືອງສ່ວຍໃຫ້ແກ່ສັກດິນາສະຫຍາມ, ພ້ອມໆກັນໃນປີ 1779. ຫາ ປີ 1893.

II.ການປະຕິບັດກົນອຸບາຍຮຸກຮານ ແລະ ປຸ້ນສະດົມຂອງສັກດິນາສະຫຍາມ ຕໍ່ອານາຈັກລາວລ້ານຊ້າງວຽງຈັນ.

ເພື່ອປະຕິບັດກົນອຸບາຍທີ່ວ່າ: ຂະຫຍາຍອານາເຂດ ດ້ວຍການເອົາປະເທດອ້ອມຂ້າງມາເປັນຂອງຕົນ ໂດຍສະເພາະແມ່ນ ອານາຈັກລາວລ້ານຊ້າງນັ້ນ, ສັກດິນາສະຫຍາມໄດ້ມີການເຄື່ອນໄຫວຕົວຈິງ ດັ່ງນີ້:

1. ການບຸກ (ໂຈມຕີ) ປຸ້ນສະດົມ ວຽງຈັນ ໂດຍສັກດິນາສະຫຍາມ.

ເມື່ອໄດ້ການລະໂອກາດເໝາະສົມ ສະຫຍາມກໍ່ຄ່ອຍໆ ລຳລຽງກອງທັບຫລວງ ແລະ ຍົກ ກຳລັງທະຫານຂອງຕົນ ເຂົ້າມາຕັ້ງຢູ່ ເມືອງ ຊາຍຟອງ ແລ້ວສະຫຍາມ ກໍສົ່ງກຳລັງອອກໄປປິດ ລ້ອມ ນະຄອນຫລວງວຽງຈັນ ທາງດ້ານໃຕ້ ແລະ ດ້ານຕາເວັນອອກ, ແລ້ວໃຊ້ປືນໃຫຍ່ ຍິງເຂົ້າ ໃສ່ໃນກຳແພງເມືອງ ເພື່ອບັງຄັບໃຫ້ ເຈົ້າ ສິລິບຸນຍະສານ ອ່ອນຍອມ ແລະ ຍົກ ວຽງຈັນ ເປັນ ເມືອງຂຶ້ນ. ພ້ອມດຽວກັນນັ້ນ ເຂົາກໍສົ່ງກຳລັງມາປຸ້ນຈີ້, ຈູດເຜົາບ້ານເຮືອນຂອງ ປະຊາຊົນ ທີ່ຢູ່ ອ້ອມວຽງຈັນ, ແລ້ວເກັບກວດເອົາຊັບສົມບັດ, ສະບຽງອາຫານ, ສັດລ້ຽງເຊັ່ນ: ງົວ, ຄວາຍ ເປັນ ຕົ້ນ ເພື່ອລ້ຽງກອງທັບຂອງ ເຂົາທຸກວັນ. ກອງທັບສະຫຍາມປິດລ້ອມ ວຽງຈັນ ເຖິງ 4 ເດືອນ ແຕ່ ຍັງບໍ່ສາມາດຢຶດເອົາ ວຽງຈັນ ໄດ້. ດັ່ງນັ້ນ ແມ່ທັບສະຫຍາມ ຈຶ່ງຫັນມາໃຊ້ກົນອຸບາຍ ທີ່ເຄີຍໃຊ້ ໄດ້ຜົນມາແລ້ວ ໃນການຢຶດເອົາ ເມືອງ ພະໂຄ ແລະ ວຽງຄຸກ, ດ້ວຍການຈັບເອົາ ປະຊາຊົນ ຢູ່ ເຂດ ເມືອງ ຊາຍຟອງ ມາຕັດຄໍ ເອົາຫົວໃສ່ເຮືອຫລາຍລຳ ແລ້ວບັງຄັບໃຫ້ແມ່ຍິງ ເມືອງ ຊາຍ ຟອງ, ໜອງຄາຍ, ພາຍເຮືອ ຂຶ້ນມາຕາມແຄມແມ່ນ້ຳຂອງ ທ່າວັດຈັນ ຮ້ອງປ່າວຂ່າວຂາຍ ຫົວຄົນ. ປະຊາຊົນ ວຽງຈັນ ເຫັນເຫດການໂຫດຮ້າຍຄືແນວນັ້ນ ກໍຕົກໃຈຢ້ານກົວທະຫານສະ ຫຍາມ, ສະນັ້ນ ຈຶ່ງເກີດມີສະພາບການແຕກຕື່ນ, ຂາດຈິດໃຈສູ້ຮົບ, ເກີດສະພາບການສັບສົນ ວຸ້ນວາຍ ແລະ ອື່ນໆ. ເມື່ອແມ່ທັບສະຫຍາມ ກຳສະພາບການແນວນັ້ນໄດ້, ຈຶ່ງສັ່ງລະດົມກຳລັງ ບຸກໂຈມຕີທຸກດ້ານຂອງ ນະຄອນຫລວງວຽງຈັນ.

ເມື່ອສາມາດເຂົ້ານະຄອນວຽງຈັນໄດ້ແລ້ວ ກອງທັບຫລວງຂອງສະຫຍາມ ກໍຈັບເອົາ ເຈົ້າ ມະຫາອຸປະລາດນັນທະເສນ, ເຈົ້າວັງໜ້າ, ເຈົ້າຍິງຍອດຟ້າກັນລະຍານີ ພ້ອມດ້ວຍນາງສາວສະ ໜົມທັງໝົດປະຈຳລາຊະວັງວຽງຈັນ ແລະ ບັນດາເສນາມຸນຕີທັງຝ່າຍພົນລະເຮືອນ ແລະ ທະ ຫານຢ່າງງ່າຍດາຍ. ຈາກນັ້ນ ກໍໄດ້ເກັບກວາດເອົາຊັບສົມບັດ ວັດຖຸທີ່ມີຄ່າ ທັງໝົດຢູ່ໃນພະລາ ຊະວັງ, ຫໍໂຮງ ແລະ ຊ້າງມ້າພາຫະນະສົງຄາມ, ພ້ອມທັງເຄື່ອງວັດຖຸບູຮານ, ວັດຖຸສິລະປະ ທີ່ ຢູ່ຕາມວັດວາອາຮາມຕ່າງໆ ໃນ ນະຄອນຫລວງວຽງຈັນ ໄປຈົນກ້ຽງ ເຊັ່ນ: ພະພຸດທະຮູບປາງ ຕ່າງໆ ທີ່ຫລໍ່ດ້ວຍແກ້ວ, ດ້ວຍທອງສຳລິດ, ທອງເຫລືອງ, ທອງແດງ, ເງິນ ແລະ ຄຳ ເປັນຈຳ ນວນຫລວງຫລາຍ ໃນນັ້ນມີພະແກ້ວມໍລະກົດ, ພະບາງ ແລະ ພະແຊກຄຳ ເປັນຕົ້ນ. ນອກຈາກ ສິ່ງສັກສິດອັນມີຄ່າດັ່ງກ່າວແລ້ວ ຍັງມີບັນດາຄຳພີດີກາ, ໜັງສືພົງສາວະດານ, ນິທານພື້ນເມືອງ, ວັນນະກຳ ແລະ ຕຳລາຍາພື້ນເມືອງຕ່າງໆ ທີ່ຖືກຂົນຂ້າມໄປໄວ້ເມືອງ ພັນພ້າວ ແລະ ສັ່ງໃຫ້ ສ້າງ ຫໍພະແກ້ວ ຊົ່ວຄາວໄວ້ທີ່ນັ້ນ. ພ້ອມນັ້ນ, ມະຫາກະສັດເສິກ ກໍສັ່ງໃຫ້ທະຫານສະຫຍາມ ກວາດຕ້ອນເອົາຄອບຄົວຊາວວຽງຈັນ ຂ້າມໄປໄວ້ຢູ່ເມືອງ ພັນພ້າວ, ນອກໜອງຄາຍ.

ມະຫາກະສັດເສິກ, ເມື່ອຢຶດເອົາ ນະຄອນຈຳປາສັກ ຂອງເຈົ້າ ໄຊຍະກຸມມານ ແລະ ຢຶດ ເອົາ ນະຄອນຫລວງວຽງຈັນ ຂອງເຈົ້າ ສິລິບຸນຍະສານ ໄດ້ແລ້ວກໍບັງຄັບໃຫ້ເຈົ້າ ສຸລິຍະວົງ ເຈົ້າ ແຜ່ນດິນອານາຈັກ ຫລວງພະບາງ ຍອມເປັນເມືອງສ່ວຍຂອງສະຫຍາມອີກ. ໃນເວລາກອງທັບ ສະຫຍາມ ຍັງຕັ້ງຢູ່ ເມືອງ ພັນພ້າວ ເພື່ອລໍຖ້າການກວາດຕ້ອນເອົາຄອບຄົວຊາວວຽງຈັນ ທີ່ຫຼົບ ໜີເຂົ້າປ່າຢູ່ນັ້ນ, ມະຫາກະສັດເສິກແມ່ທັບສະຫຍາມ ກໍໄດ້ມີຄຳສັ່ງໃຫ້ເຈົ້າ ສຸລິຍະວົງ ໜວງພະ ບາງ ໄປກວາດຕ້ອນເອົາປະຊາຊົນເຜົ່າໄທດຳ ຈາກເມືອງ ທົ່ນ ແລະ ເມືອງອື່ນໆ ທີ່ຢູ່ຕິດກັບ ຊາຍແດນ ປະເທດ ຫວຽດນາມ ມາມອບໃຫ້ແມ່ທັບສະຫຍາມທີ່ ເມືອງ ພັນພ້າວ, ກອງທັບສະ ຫຍາມໄດ້ຕັ້ງຢູ່ ເມືອງ ພັນພ້າວ ຈົນເຖິງລະດູແລ້ງ ປີ 1780 ເພື່ອລໍຖ້າການກວາດຕ້ອນເອົາປະ ຊາຊົນ ບັນດາເຜົ່າລາວ. ກ່ອນຈະກັບກຸງເທບ, ມະຫາກະສັດເສິກໄດ້ແຕ່ງໃຫ້ ພະຍາ ສຸໂພ ເປັນ ຜູ້ປົກຄອງ ນະຄອນວຽງຈັນ ເພື່ອຮັກສາຜົນປະໂຫຍດແກ່ສະຫຍາມ, ແລ້ວກໍໄດ້ໃຫ້ທະຫານສະ ຫຍາມ ຄຸມປະຊາຊົນລາວບັນດາເຜົ່າ ນັບເປັນພັນໆຄອບຄົວ ຊຶ່ງມີລາຊະບຸດ, ລາຊະທິດາເສ ນາມຸນຕີທັງຫລາຍພ້ອມທັງພໍ່ຄ້າ, ຄະລຶຫະບໍດີ, ເສດຖີພ້ອມດ້ວຍຊັບສົມບັດວັດຖຸສິລະປະ, ພະ ແກ້ວມໍລະກົດ, ພະບາງ, ພະແຊກຄຳ ແລະ ສາຕາອາວຸດລົງໄປກຸງເທບ. ເມື່ອໄປຮອດເມືອງ ສະລະບູລີ ແລ້ວມະຫາກະສັດເສິກ ໄດ້ໃຫ້ຄອບຄົວລາວຈຳນວນໜຶ່ງ ຕັ້ງຖິ່ນຖານທຳມາຫາກິນ ຢູ່ທີ່ນັ້ນ, ສ່ວນປະຊາຊົນລາວເຜົ່າໄທດຳ ກໍຖືກສົ່ງລົງໄປຢູ່ ເມືອງ ເພັດຊະບູລີ.

ສະເພາະ ເຈົ້າ ນັນທະເສນ, ເຈົ້າ ວັງໜ້າ, ເຈົ້າ ຍິງຍອດຟ້າກັນລະຍານີ, ເຈົ້າ ອະນຸວົງ ພ້ອມເສນາມຸນຕີທີ່ສຳຄັນ ແລະ ນາງສະໜົມ ທັງຫຼາຍນັ້ນ ແມ່ນຖືກມະຫາກະສັດເສິກຄວບຄຸມ ຕົວໄປໄວ້ຢູ່ ກຸງເທບ ໝົດ. ເລ່ກົນອັນເລິກແລບອັນໜຶ່ງຂອງພວກສະຫຍາມ ເພື່ອຫວັງຈະກືນ ກິນລາວແບບຕະຫຼອດການນັ້ນ ກໍຄົ້ນຫາເອົາບັນດາລູກຫລານ ແລະ ເຊື້ອວົງຂຸນນາງ ຂອງເຈົ້າ ສິ ລິບຸນຍະສານ ແຫ່ງນະຄອນວຽງຈັນ ແລະ ຂອງເຈົ້າ ໄຊຍະກຸມມານ ແຫ່ງນະຄອນ ຈຳປາສັກ ທີ່ ຖືກຈັບໄປນັ້ນ, ໄດ້ຖືກເອົາໃຈໃສ່ລ້ຽງດູເປັນຢ່າງດີ ເພື່ອຫວັງຈະຫັນປ່ຽນໃຫ້ພວກນີ້ກາຍເປັນລູກ ແຫລ້ງຜູ້ບໍລິສຸດ ແລະ ຊື່ສັດຕໍ່ສະຫຍາມຕະຫລອດໄປ. ພວກເຂົາໄດ້ໃຫ້ທີ່ພັກພາອາໄສ,ໃຫ້ໜ້າ ທີ່ການ ແລະ ໃຫ້ມີຊີວິດຢູ່ຢ່າງສະດວກສະບາຍ ທັງອົບຮົມພວກນີ້ ໃຫ້ຊື່ສັດຕໍ່ສະຫຍາມ ສຳລັບ ຜູ້ທີ່ມີອາຍຸຍັງນ້ອຍ ທີ່ຍັງບໍ່ທັນຮູ້ຄວາມປານໃດ (ໃນນັ້ນມີ ເຈົ້າ ອະນຸວົງ ຊຶ່ງໃນປີຖືກຈັບໄປນັ້ນ ມີອາຍຸພຽງ 11 ປີ) ພວກເຂົາໄດ້ໃຫ້ ການສຶກສາຮ່ຳຮຽນຮ່ວມກັບບັນດາລູກຫລານ ຂອງລາຊະ ຕະກຸນສະຫຍາມ, ມີພະອາຈານສອນຜູ້ດຽວກັນ ແລະ ໃຊ້ຊີວິດຢູ່ໃນພະລາຊະວັງນຳກັນ. ພວກ ເຂົາຢາກໃຫ້ຄົນລາວເຫຼົ່ານີ້ ລືມຊາດຫຼົງເຊື້ອຂອງຕົນເອງ, ຢາກໃຫ້ທໍລະຍົດຕໍ່ຊາດຂອງຕົນເອງ ແລະ ຢາກໃຫ້ກາຍເປັນເຄື່ອງມືປົກຄອງທີ່ບອກໄດ້ໃຊ້ຟັງຂອງພວກເຂົາ. ແຕ່ເຖິງຢ່າງໃດກໍຕາມ ຍ້ອນຄົນລາວເຫລົ່ານັ້ນ ຍັງມີນ້ຳໃຈຮັກຊາດແພງເຊື້ອ ຢ່າງດູດດື່ມ ຮັກເອກະລາດ ແລະ ອິດສະ

ຫຼະພາບຢ່າງໝົດຊີວິດຈິດໃຈ. ດັ່ງນັ້ນ ໃນບຸກຄົນຈຳນວນນີ້ມີຜູ້ຮັກຊາດຫຼາຍຄົນ, ຊຶ່ງເດັ່ນທີ່ສຸດ ແມ່ນ ເຈົ້າ ອະນຸວົງ, ຊຶ່ງຕໍ່ມາໄດ້ນຳພາປະຊາຊົນລາວ ລຸກຮື້ຂຶ້ນຕໍ່ສູ້ເພື່ອກູ້ເອກະລາດ ແລະ ອິດ ສະຫລະພາບຂອງຊາດລາວ ຢ່າງອົງອາດກ້າຫານຈົນ ໄດ້ກາຍເປັນວິລະກະສັດຂອງຊາດລາວ ຜູ້ໜຶ່ງທີ່ມີຊື່ສຽງໂດ່ງດັງເຖິງປະຈຸບັນ. ປະຊາຊົນລາວ, ປະເທດຊາດລາວ ໄດ້ຈາລຶກບຸນຄຸນ, ຄຸນ ງາມຄວາມດີ ໄວ້ໃນປຶ້ມຄຳ ປະຫວັດສາດ ຂອງຊາດລາວ ຈົນຮອດທຸກວັນນີ້.

2. ການກົດຂີ່ຂູດຮີດ ຂອງສັກດິນາສະຫຍາມ ຕໍ່ປະຊາຊົນລາວ, ເປັນຕົ້ນແມ່ນຕໍ່ຊາວນະ ຄອນຫລວງວຽງຈັນ.

2.1 ການເສຍສ່ວຍສາອາກອນ.

ໃນແຕ່ລະປີ ເຈົ້າຂອງປະເທດສະລາດລາວ ທັງ 3 ອານາຈັກ ຕ້ອງໄດ້ສົ່ງເຄື່ອງບັນນາ ການອັນມີຄ່າ ແລະ ດອກໄມ້ເງິນ ດອກໄມ້ຄຳ.[1] ພ້ອມທັງເງິນສ່ວຍສາອາກອນ ທີ່ເກັບໄດ້ຈາກ ປະຊາຊົນຂອງຕົນ ລົງໄປຖວາຍເຈົ້າຊີວິດສະຫຍາມຢູ່ບາງກອກ. ເພື່ອກອບໂກຍເງິນຄຳເຂົ້າຄັ່ງ ຫລວງ ແລະ ເພື່ອສ້າງຄວາມຮັ່ງມີ ໃຫ້ແກ່ເຂົາເອງນັ້ນ, ພວກສັກດິນາສະຫຍາມ ໄດ້ອອກລະ ບຽບການ ຫາລາຍໄດ້ ຊຶ່ງເຂົາເອີ້ນວ່າ: ລະບຽບວ່າດ້ວຍ " ທີ່ມາຂອງຜົນປະໂຫຍດ ແຜ່ນດິນ 3 ຢ່າງ " ຄື:

- ຜົນປະໂຫຍດ ຈາກສ່ວຍສາອາກອນ
- ຜົນປະໂຫຍດ ຈາກການຜູກຂາດສິນ ຄ້າຕ່າງໆ
- ຜົນປະໂຫຍດ ຈາກເຮືອສິນຄ້າຫຼວງ.

ການເກັບສ່ວຍສາອາກອນ ຂອງສະຫຍາມຕໍ່ຫົວ ປະຊາຊົນລາວ ວຽງຈັນ, ມີຢູ່ສາມປະ ເພດ ຄື:

- ເກັບຈາກການປະກອບອາຊີບ.
- ເກັບຄ່າສາງເຂົ້າ ຫລື ເກັບຈາກຜົນຜະລິດຕົວຈິງ.
- ເກັບຈາກຫົວຄົນໄວໜຸ່ມ ຊາຍຊະກັນ ທີ່ມີກຳລັງວັງຊາແຂງແຮງ.

---

1. ໝາຍເຖິງຕົ້ນດອກໄມ້ (ເໝືອນກັບຄົນລາວປະຕິບັດທຸກວັນນີ້ ເພື່ອໄຫວ້ພະ). ແຕ່ແທນທີ່ຈະແມ່ນເຈ້ຍຄຳ ຫລື ເຈ້ຍເງິນເປັນສີເຫລືອງ ແລະ ສີຂາວ ພັດແມ່ນຄຳ ແລະ ເງິນສົດແທ້, ຕີເປັນໃຍ, ເຮັດຕົ້ນດອກໄມ້ ຄືຈະບູຊາພະນັ້ນ ນຳໄປຖວາຍທຸກໆ ປີເອີ້ນວ່າ ເຄື່ອງບັນນາການ (ຂອງຕ້ອນ ຖ້າແຄວ້ນໃດບໍ່ສົ່ງເປັນປົກກະຕິ ຕ້ອງຖືກໂທດໜັກ, ເຖິງຂັ້ນ ເອົາໄປປະຫານຊີວິດ).

ເມື່ອມີຄຳສັ່ງ ໃຫ້ເກັບດ້ວຍເງິນກໍຕ້ອງໄດ້ເງິນ, ປະຊາຊົນລາວ ມີອາຊີບເຮັດໄຮ່ນາຮົ້ວ ສວນ ຫລື ດຳເນີນທຸລະກິດບາງຢ່າງ ເຊັ່ນ: ເກັບເຄື່ອງປ່າຂອງດົງ, ການປະໂມງ, ການຕົ້ມເຫຼົ້າ ເປັນຕົ້ນ.

ຕົວຢ່າງ: ອາກອນຄ່ານາ ໄຮ່ລະ 25 ສະຕາງ (1 ໄຮ່ຫຼວງ ເທົ່າກັບ 1.600 ຕາຕະລາງ ແມັດ), ຕົ້ນໝາກມ່ວງ 1 ຕົ້ນ ເກັບ 1 ບາດ (ວ່າແຕ່ມີນາ ຫລື ມີຕົ້ນໝາກມ່ວງ ແມ່ນໃຫ້ເກັບ ໂລດ ໂດຍບໍ່ຄິດວ່າໄດ້ເຮັດນາ ຫລື ບໍ່ເຮັດບ່ເຮັດກໍຕາມ ຫຼື ຕົ້ນໄມ້ມີໝາກ ຫຼື ບໍ່ມີໝາກກໍຕາມ. ມີຄຳສັ່ງບັງຄັບວ່າເຈົ້ານະຄອນ ຫລື ເຈົ້າເມືອງ ຝ່າຍຕາແສງ ພໍ່ບ້ານ ຕ້ອງຮັບຜິດຊອບເກັບໃຫ້ ໄດ້, ແລ້ວເອົາມາທ້ອນໂຮມໄວ້ຢູ່ຂັ້ນເມືອງ ແລ້ວຈຶ່ງສົ່ງລົງໄປເຂົ້າຄັງສິນຄ້າ ແລະ ພະຄັງຫຼວງ ທີ່ ບາງກອກ ຕາມກຳນົດເວລາ; ໃນທີ່ນີ້ໄດ້ແກ່ ເຄື່ອງລາຊະບັນນາການ ທີ່ເຈົ້າຊີວິດປະເທດສະ ລາດ ວຽງຈັນ, ຫລວງພະບາງ ແລະ ຈຳປາສັກ... ຕ້ອງສົ່ງໄປຖວາຍແກ່ເຈົ້າຊີວິດສະຫຍາມ. ຖ້າ ຫົວເມືອງໃດ ມີແຮ່ທາດຊະນິດໃດ ເຈົ້າຊີວິດສະຫຍາມ ກໍຈະສັ່ງໃຫ້ເສຍສ່ວຍເປັນແຮ່ທາດຊະ ນິດນັ້ນອີກ ເຊັ່ນ: ເມືອງ ອັດຕະປື ເປັນເມືອງທີ່ມີແຮ່ຄຳຫລາຍ ກໍໃຫ້ເສຍສ່ວຍເປັນຄຳແທ່ງ.

" ການເກັບຄ່າສາງເຂົ້າ " ຄືຫຼັງຈາກການເກັບກ່ຽວເຂົ້າໄຮ່ເຂົ້ານາແລ້ວ, ຕ້ອງເສຍສ່ວຍ ເປັນເຂົ້າເປືອກສົດ ສົ່ງເຂົ້າໄປຄັງສິນຄ້າຫຼວງຢູ່ບາງກອກ. ສ່ວຍອີກຊະນິດໜຶ່ງ ເອີ້ນວ່າ: " ການ ເສຍສ່ວຍຄ່າຫົວ " ຄືເກັບເອົາຕາມຈຳນວນຊາຍຊະກັນ. ທຸກຄົນທີ່ມີອາຍຸຢູ່ໃນເກນ 18 ປີ ຂຶ້ນ ໄປຈະຕ້ອງເສຍສ່ວຍ. ນອກຈາກນີ້ ຍັງຕ້ອງເສຍສ່ວຍເປັນສິນຄ້າ ທີ່ມີລາຄາແພງ ຕາມທ້ອງຕະ ຫລາດອີກ ເຊັ່ນ: ນ້ຳກ້ຽງ, ປ່ານ, ໝາກແໜ່ງ, ຍານ, ຄັ່ງ, ງາຊ້າງ, ນໍແຮດ, ຊ້າງ, ໜັງສັດເປັນ ໂຕສັດມ້າ, ງົວ, ຄວາຍ... ສ່ວຍດັ່ງກ່າວນີ້ ຈະຕ້ອງຈັດສົ່ງເຂົ້າຄັງສິນຄ້າຫລວງ ໃຫ້ທັນຕາມກຳ ນົດເວລາອີກດ້ວຍ. ນອກນີ້ອີກ ຍັງມີການເສຍສ່ວຍ ໃນການຮັບມູນມໍລະດົກຈາກພໍ່ແມ່, ສ່ວຍ ລ້ຽງແຂກເມືອງ ຫຼື ລ້ຽງຂ້າຫຼວງສະຫຍາມ ທີ່ມາກວດລາຊະການ, ສ່ວຍການກໍ່ສ້າງ ແລະ ສ່ວຍ ເສິກສົງຄາມ ເປັນຕົ້ນ ຊຶ່ງເອີ້ນວ່າ ຄ່າພັດທະນາ ຫລື ຄ່າລີຊາ ໄດ້ແກ່ເງິນ ແລະ ຊັບສິນ ທີ່ໄດ້ ຈາກການປັບໄໝຄູ່ຄະດີຄວາມ ແລະ ປັບໄໝຜູ້ເຮັດຜິດກົດໝາຍ.

2.2. ການຜູກຂາດກ່ຽວກັບສິນຄ້າສົ່ງອອກ.

ຜົນປະໂຫຍດ ທີ່ໄດ້ຈາກການຜູກຂາດສິນຄ້າ ທີ່ມີລາຄາແພງ ຫລື ຫາຍາກນັ້ນ ໄດ້ແກ່ ການຜູກຂາດການຄ້າພາຍໃນ ແລະ ການຄ້າຕ່າງປະເທດ ເຊັ່ນ: ອາວຸດປືນ, ລູກປືນ, ໝໍ້ປືນ, ແພຜ້າ, ຂີ້ເຈຍ, ກົ່ວ, ຢາງ, ໝາກແໜ່ງ, ຍານ, ຄັ່ງ, ໜັງສັດ, ຊ້າງ,ງາຊ້າງ, ໜໍ່ແຮດ, ນ້ຳກ້ຽງ, ປ່ານ, ສິນຄ້າເຫຼົ່ານີ້ແມ່ນພວກສະຫຍາມ ເປັນຜູ້ຜູກຂາດແຕ່ຜູ້ດຽວ ການຮັບຊື້ຈາກພໍ່ຄ້າຕ່າງປະ ເທດ ມາຂາຍໃຫ້ປະຊາຊົນ ແລະ ຮັບຊື້ຈາກປະຊາຊົນ ໂດຍຜ່ານບັນດາເຈົ້າເມືອງ ໃນຫົວເມືອງ

ຕ່າງໆ ເປັນຜູ້ບອກຊື້ ແລະ ເກັບເກນເອົານຳປະຊາຊົນ ແລ້ວນຳສິ່ງໄປເຂົ້າຄັງສິນຄ້າຫຼວງຢູ່ ບາງກອກ ໃຫ້ທັນຕາມກຳນົດເວລາ ເພື່ອໃຫ້ສັກດິນາສະຫຍາມເປັນຜູ້ນຳຂາຍໃຫ້ພໍ່ຄ້າຕ່າງປະເທດ. ຄົນລາວ ບໍ່ມີສິດຂາຍເຄື່ອງເຫລົ່ານີ້ ເດັດຂາດ.

ເຮືອສິນຄ້າຫລວງ ໄດ້ແກ່ການຜູກຂາດການຄ້າກັບພໍ່ຄ້າຕ່າງປະເທດ ຄື: ເມື່ອເຮືອຕ່າງປະເທດ ເຂົ້າມາຈອດຢູ່ ທ່າບາງກອກ ແລ້ວ, ແມ່ນພວກເຈົ້າໜ້າທີ່ຄັງສິນຄ້າຫລວງ ລົງໄປກວດກາຄັດເລືອກເອົາສິນຄ້າທີ່ຕົນເອງຕ້ອງການ, ໂດຍສະເພາະ ແມ່ນອາວຸດປືນລູກປືນ ທີ່ມາຈາກນາຍທຶນຕາເວັນຕົກ, ທັງນີ້ກໍເພື່ອແນໃສ່ເຮັດສົງຄາມແຜ່ອານາເຂດຂອງຕົນ, ສ່ວນທີ່ເຫຼືອຄວາມຕ້ອງການ ຈຶ່ງອະນຸຍາດໃຫ້ຂາຍທົ່ວໄປໄດ້. ການຂົນສົ່ງສິນຄ້າທີ່ມີ ລາຄາແພງອອກຂາຍຕ່າງປະເທດເຊັ່ນ: ສົ່ງໄປອິນເດຍ, ຈີນ, ອິນໂດເນເຊຍ. ກໍແມ່ນພວກເຮືອສິນຄ້າຫລວງ ເຫລົ່ານັ້ນ ເປັນຜູ້ຜູກຂາດໃນການຂົນສົ່ງ.

ບັນດາສິນຄ້າທີ່ມີລາຄາແພງ ແລະ ຫາຍາກ ທີ່ບັນດາພໍ່ຄ້າຕ່າງປະເທດ ຕ້ອງການນັ້ນ ສ່ວນຫຼາຍ ແມ່ນມີຢູ່ຕາມທຳມະຊາດໃນດິນແດນລາວ ເຊັ່ນ: ຍານ, ຄັ່ງ, ໝາກແໜ່ງ, ນ້ຳມ້ຽງ, ປ່ານ, ນໍ, ແຮດ, ງາ, ແຂ້ວເສືອ... ຊຶ່ງປະຊາຊົນລາວ ຕ້ອງເປັນຜູ້ແບກຫາບພາລະ ໃນການຊອກຫາ ແລະ ນຳສິ່ງຊ້າງໄປເຂົ້າຄັງສິນຄ້າຫລວງຢູ່ ບາງກອກ ເພື່ອໃຫ້ພວກເຂົາຄ້າຂາຍກັບພໍ່ຄ້າຕ່າງປະເທດ ໄດ້ສະດວກ ແລະ ເພື່ອສ້າງຮັ່ງຄູນມີໃຫ້ແກ່ພວກເຂົາ. ສ່ວນປະຊາຊົນນັ້ນ ແມ່ນບໍ່ໄດ້ຮັບຜົນປະໂຫຍດຫຍັງເລີຍ.



ທະຫານສະຫຍາມ ສະໄໝ 1890

2.3. ການເກັບສ່ວຍສາອາກອນ ກ່ຽວກັບດ້ານແຮງງານຄົນ.

ນອກຈາກເກັບເກນສ່ວຍສາອາກອນ ທີ່ກ່າວມາຂ້າງເທິງນີ້ແລ້ວ ພວກສັກດິນາສະຫຍາມ ຍັງເກັບເກນແຮງງານຄົນ ຢ່າງໜັກໜ່ວງອີກ. ປະຊາຊົນລາວ ທີ່ຖືກກວາດຕ້ອນເອົາໄປຢູ່ດິນສະຫຍາມນັ້ນ ແມ່ນຕົກເປັນຂ້ອຍຂ້າມ້າໃຊ້ ຂອງພວກເຂົາຢ່າງໂຫດຮ້າຍປ່າເຖື່ອນ. ຈົນເຮັດໃຫ້ຊາວອີສານ ໃນປະຈຸບັນ ຈົດຈຳເລົ່າຕໍ່ປາກ ໃຫ້ລູກຫລານຮູ້ຮອດຫລາຍເຊັ່ນຄົນ. ພວກເຂົາຖືວ່າ ປະຊາຊົນລາວ ຈຳນວນນີ້ແມ່ນ " ຂ້າທາດຮັບໃຊ້ " ສ່ວນປະຊາຊົນລາວ ທີ່ຍັງເຫລືອຢູ່ທັງ 2 ຝັ່ງ ຂອງນັ້ນ ກໍແມ່ນຕົກຢູ່ໃນຖານະເປັນປະຊາຊົນ ຂອງປະເທດສະລາດ ຄືເປັນເມືອງຂຶ້ນ ແລະ ເມືອງສ່ວຍ ຈຶ່ງບໍ່ມີສິດເທົ່າທຽມກັບ ປະຊາຊົນສ່ວນກາງ ຂອງສະຫຍາມແຕ່ຢ່າງໃດ. ສະຫຍາມ ຖືວ່າປະຊາຊົນ ໃນປະເທດສະລາດທັງປວງ ເປັນຂ້ອຍຂ້າຮັບໃຊ້ຕົນຕາມກົດໝາຍ. ດັ່ງນັ້ນ, ຈຶ່ງ ເຫັນໄດ້ວ່າ ໃນການສ້າງ ເມືອງ ບາງກອກ ໃໝ່ທີ່ເອີ້ນວ່າ " ກຸງເທບ " ນັ້ນແມ່ນປະຊາຊົນລາວ ລ້ານຊ້າງ ແລະ ປະຊາຊົນ ຂະເໝນ ເປັນຜູ້ຖືກເກນໄປອອກແຮງງານ ໃນການກໍ່ສ້າງແບບຂ້າ ທາດ ໂດຍບໍ່ໄດ້ຮັບຄ່າຈ້າງ, ລາງວັນຫຍັງໝົດ. ແຖມຊ້ຳຍັງກິນເຂົ້າປາອາຫານ ຂອງຕົນເອງອີກ ດ້ວຍ ເຊັ່ນ: ໃນປີ 1783 ເຈົ້າ ນັນທະເສນ ຜູ້ປົກຄອງ ວຽງຈັນ ໄດ້ຮັບຄຳສັ່ງຈາກເຈົ້າຊີວິດສະ ຫຍາມ ໃຫ້ເກນກຳລັງພົນໄປອອກແຮງງານສ້າງ ບາງກອກ.

ແຕ່ປີ 1789 ຫາ 1790, ປະຊາຊົນລາວ ວຽງຈັນ ແລະ ຫົວເມືອງລາວອື່ນໆ ຕາມສອງ ຝັ່ງແມ່ນ້ຳຂອງ ເປັນຈຳນວນຫຼາຍໝື່ນຄົນ ໄດ້ຖືກເກນລົງໄປ ບາງກອກ ອີກ ເພື່ອຂຸດຄອງຕ່າງໆ ຢູ່ຮອບນອກ ເມືອງ ບາງກອກ. ປະຊາຊົນລາວໄດ້ຮັບຄວາມທຸກຍາກທໍລະມານ ຢ່າງແສນສາ ຫັດ ແລະ ລົ້ມຕາຍ ດ້ວຍພະຍາດອະຫິວາເກືອບໝົດ. ມີຄົນລາວທີ່ລອດເຫລືອຈຳນວນໜຶ່ງ ໄດ້ ກັບມາບ້ານເກີດເມືອງນອນ ແລະ ໄດ້ແຈ້ງຂ່າວຮ້າຍນີ້ແກ່ຍາດຕິພີ່ນ້ອງຂອງຜູ້ຕາຍຮູ້. ອັນໄດ້ ເຮັດໃຫ້ເກີດຄວາມ ໂສກເສົ້າ ສະຫລົດໃຈ ໄປທົ່ວດິນແດນລາວ ທັງສອງຝັ່ງແມ່ນ້ຳຂອງ, ຍ້ອນ " ຄອງແສນແສບ " ເຖິງທຸກວັນນີ້.

2.4. ເລ່ກົນແບ່ງແຍກ ແລະ ການສວຍໃຊ້ກອງທັບສັກດິນາລາວ.

ໃນປີ 1792 ສະຫຍາມ ໄດ້ມີຄຳສັ່ງໃຫ້ອາມາຈັກລາວລ້ານຊ້າງວຽງຈັນ ຂຶ້ນໄປຕີແຄວ້ນ ພວນຊຽງຂວາງ ແລະ ໃຫ້ກວດຕ້ອນເອົາຊາວພວນໄປບາງກອກ. ກອງທັບວຽງຈັນ ພາຍໃຕ້ການ ບັນຊາຂອງ ເຈົ້າ ແກ້ວ ໄດ້ຂຶ້ນໄປກວາດຕ້ອນເອົາຄອບຄົວຍິງຊາຍນ້ອຍໃຫຍ່ ໄດ້ຈຳນວນຫຼາຍ ພັນຫລາຍໝື່ນຄອບຄົວແລ້ວສົ່ງໄປບາງກອກ ເພື່ອໃຫ້ໄປຊ່ວຍສ້າງ ເມືອງ ບາງກອກ ຄືກັບປະ ຊາຊົນລາວ ໃນແຖບແຄມແມ່ນ້ຳຂອງ ທີ່ຖືກເກນໄປກ່ອນ ແລະ ຕາຍໄປສ່ວນຫລາຍແລ້ວ.

ຄຽງຄູ່ກັບການເກນແຮງງານນັ້ນ ເວລາມີເສິກສົງຄາມພວກເຂົາກໍເກນເອົາທະຫານ ຈາກ ປະຊາຊົນລາວ ຫຼາຍຄັ້ງຫຼາຍຫົນ ເພື່ອໄປຕາຍຕາງພວກເຂົາ ເພື່ອປະຕິບັດເລ່ກົນເຫຼົ່ານີ້ ເຈົ້າຊີວິດສະຫຍາມ ຍຸຍົງສົ່ງເສີມຕົວະຍົວະ ແລະ ຍຸແຍ່ໃຫ້ເກີດຄວາມຂັດແຍ້ງ ແລະ ຄວາມແຕກ ແຍກກັນເລື້ອຍໆ ໃນໝູ່ສັກດິນາລາວ. ພວກເຂົາໄດ້ຕົກລົງແຕ່ງຕັ້ງໃຫ້ ເຈົ້າ ອະນຸລຸດ, ຜູ້ເປັນ ອ້າຍຂອງ ເຈົ້າ ສຸລິຍະວົງ, (ເຊື້ອສາຍເຈົ້າຊີວິດ ຫຼວງພະບາງ) ຂຶ້ນເປັນເຈົ້າຊີວິດຫຼວງພະບາງ, ແຕ່ງຕັ້ງ ເຈົ້າ ນາກ (ຜູ້ເປັນນ້ອງ) ເປັນເຈົ້າ ອຸປະຣາດ ແລະ ແຕ່ງຕັ້ງ ເຈົ້າ ມັນທາຕຸລາດ (ລູກ ຂອງເຈົ້າ ອະນຸລຸດ) ເປັນເຈົ້າລາຊະວົງ ແລ້ວສົ່ງຂຶ້ນມາ ຫລວງພະບາງ ເພື່ອດຳເນີນແຜນການ ສ້າງຄວາມແຕກແຍກໃນອານາຈັກລາວລ້ານຊ້າງ.

ເມື່ອໄດ້ເປັນເຈົ້າຊີວິດຫລວງພະບາງ ແລ້ວໃນປີ 1794 ເຈົ້າ ອະນຸລຸດ ໄດ້ຄົບຄິດກັບເຈົ້າ ຊຽງຂວາງ ຜູ້ເປັນນ້ອງຂອງ ເຈົ້າ ຊິນພູ ໃຫ້ໄປນຳເອົາກອງທັບສັກດິນາດ້ານຫວຽດ ຂອງພວກ ໄຕເຊີນ ແລ້ວໃຫ້ເຂົ້າມາສົມທົບກັນຕີເອົາແຄວ້ນພວນຊຽງຂວາງ. ສາມກອງທະຫານ ຄື: ຂອງ ຫຼວງພະບາງ, ຂອງເຈົ້າ ຊຽງຂວາງ ແລະ ຂອງດ້ານຫວຽດ ພາກັນຕັ້ງຄ້າຍລ້ອມເມືອງ ຊຽງຂວາງ ໄວ້, ແລ້ວນາບຊູ່ໃຫ້ ເຈົ້າ ຊິນພູ ຍອມອ່ອນນ້ອມ ເປັນເມືອງຂຶ້ນຂອງ ຫຼວງພະບາງ ແລະ ດ້ານ ຫວຽດ. ດັ່ງນັ້ນ, ເຈົ້າ ນັນທະເສນ ຈຶ່ງໄດ້ຈັດກອງທັບໃຫຍ່ ໂດຍເພີ່ນເອງເປັນແມ່ທັບ ແລະ ຕັ້ງ ເຈົ້າ ແກ້ວ ເປັນຮອງແມ່ທັບແລ້ວຍົກພົນຂຶ້ນໄປຕີເອົາແຄວ້ນ ພວນຊຽງຂວາງ ອີກຄັ້ງໜຶ່ງ. ກອງ ທັບຂອງວຽງຈັນ ຕ້ອງຕໍ່ສູ້ກັບກອງທັບຂອງຊາວພວນ ຊຽງຂວາງ ທັງ 3 ກອງ ຄື: ຫຼວງພະບາງ, ຊຽງຂວາງ ເອງ ແລະ ດ້ານຫວຽດ. ເຈົ້າ ອຸປະຣາດ ຄົນໜຶ່ງຂອງຝ່າຍວຽງຈັນ ໄດ້ເສຍຊີວິດໃນທີ່ ນັ້ນ ແຕ່ເຈົ້າ ນັນທະເສນ ແລະ ມະຫາອຸປະຣາດແກ້ວ ກໍສາມາດສືບຕໍ່ເຮັດສົງຄາມຂັບໄລ່ກອງ ທັບເຖື່ອນ ຂອງພວກຂະບົດອອກໄປໄດ້. ທັງໝົດນີ້ ລວ້ນແຕ່ເປັນເລ່ກົນຂອງສະຫຍາມ.

ຫລັງຈາກຕີເອົາ ເມືອງ ແຖງ ໄດ້ໃນປີ 1792 ແລ້ວ, ເຈົ້າ ນັນທະເສນ ຍັງໄດ້ສັ່ງໃຫ້ກອງ ທັບຂອງຕົນສືບຕໍ່ຕີຢຶດເອົາຫົວເມືອງ ຊຶ່ງສັກດິນາດ້ານຫວຽດ ໄດ້ຢຶດຄອງເອົານັ້ນ ໄດ້ຄືນຈົນສຳ ເລັດ. ອັນໄດ້ເຮັດໃຫ້ອານາເຂດຂອງອານາຈັກລາວລ້ານຊ້າງວຽງຈັນ ຂະຫຍາຍຕົວອອກຕື່ມຄື ພາກເໜືອ ແລະ ພາກຕາເວັນອອກສ່ຽງເໜືອ ກວມເອົາອານາຈັກຫລວງພະບາງ, ແຄວນພວນ ຊຽງຂວາງ, ຫົວພັນ ແລະ ແຄວ້ນສິບສອງຈຸໄທ ໃນຫຼັງແມ່ນ້ຳດຳ, ທາງໃຕ້ ຕາມລຳແມ່ນ້ຳຂອງ ນັບແຕ່ ເມືອງ ບ້ຽມຸກ ຂຶ້ນມາ, ທິດຕາເວັນຕົກ ກ້ຳໃຕ້ ນັບແຕ່ ເມືອງ ກາລະສິນ ແລະ ເມືອງ ພູ ຊຽວ ເຂົ້າມາ ແລະ ທິດຕາເວັນຕົກ ເມືອງ ດ່ານຊ້າຍ ເຂົ້າມາ ຈຳນວນພົນລະເມືອງ ກໍໄດ້ເພີ່ມ ຂຶ້ນຫລາຍກວ່າເກົ່າ ອັນໄດ້ເຮັດໃຫ້ບົດບາດທາງດ້ານການເມືອງ ແລະ ການທະຫານ ຂອງອາ ນາຈັກລາວລ້ານຊ້າງວຽງຈັນ ປະກົດເດັ່ນຊັດເຈນຂຶ້ນ ເພື່ອເປັນຜົນດີໃຫ້ແກ່ສະຫຍາມ, ຈີນກາຍ

ເປັນຄູ່ແຂ່ງທີ່ສຳຄັນ ຂອງສັກດິນາດ້ານຫວຽດ ແຫ່ງພວກ ໄຕເຊີນ ແລະ ສັກດິນາອື່ນໆ. ຖ້າເບິ່ງ ສະພາບລວມທາງການເມືອງ ແລະ ການທະຫານ ໃນທົ່ວແຫຼມສຸວັນນະພູມແລ້ວ ຈະເຫັນໄດ້ ວ່າ ສັກດິນາລາວລ້ານຊ້າງວຽງຈັນ ໃນລາຊະການຂອງ ເຈົ້າ ນັນທະເສນ ໄດ້ມີຄວາມເຂັ້ມແຂງ ຈົນເກືອບຈະກາຍເປັນສັກດິນາລາວທີ່ລວມສູນໄດ້. ຖ້າບໍ່ມີອຳນາດສະຫຍາມຂົ່ມຄໍໄວ້. ຍ້ອນ ອາໄສກຳລັງຂອງ ເຈົ້າ ນັນທະເສນ ໜີບຮັດພວກ ໄຕເຊີນ ຢູ່ທາງດ້ານນີ້ເປັນຜົນໃຫ້ສັກດິນາອາ ນາມຕະກຸນຫງວຽນ ພາຍໃຕ້ຂະບວນການນຳພາຟື້ນຟູອຳນາດ ຂອງຫງວຽນອັນ (ອົ໋ງຊຸ໋ງສີ) ໄດ້ມີໂອກາດ ຊອກຫາກຳລັງສະໜັບສະໜູນ ຈາກນາຍທຶນຝຣັ່ງ ມາຊ່ວຍເຫລືອ ເຮັດສົງຄາມ ຕ້ານພວກ ໄຕເຊີນ ແລະ ສາມາດຕີເອົາຊະນະພວກ ໄຕເຊີນ ໄດ້ຫຼາຍຄັ້ງ.

III. ລະບົບການຈັດຕັ້ງປົກຄອງລາວ ຂອງສັກດິນາສະຫຍາມ.

ສັກດິນາສະຫຍາມ ເຊິ່ງນຳໂດຍ ພະຍາ ສຸພາວະດີ ແລະ ກົມພະລາຊະວັງບໍ່ວອນ, ຫລັງ ຈາກສຳເລັດແຜນການຍຸຍົງສົ່ງເສີມສັກດິນາລາວ ໃຫ້ແຕກອອກເປັນ 3 ອານາຈັກແລ້ວ ກໍໄດ້ ໃຊ້ກຳລັງທີ່ເໜືອກ່ວາເຂົ້າຮຸກຮານ ແລະ ຢຶດຄອງລາວ ໃນປີ 1779 ແລະ ບັງຄັບໃຫ້ສັກດິນາ ລາວ ທັງ 3 ອານາຈັກ ຍອມເປັນເມືອງສ່ວຍ ແຕ່ນັ້ນມາ.

1. ການຈັດຕັ້ງປົກຄອງລາວໄລຍະທີ 1 ປີ 1779 - 1829.

ສຳລັບອານາຈັກລາວລ້ານຊ້າງວຽງຈັນ: ຫລັງຈາກເສຍເອກະລາດ ໃຫ້ສະຫຍາມ ໃນປີ 1779 ແລ້ວ, ພວກສະຫຍາມ ມີແຜນນະໂຍບາຍແບ່ງແຍກ ເພື່ອປົກຄອງ ຄືພວກເຂົາໄດ້ແຕ່ງ ຕັ້ງໃຫ້ ພະຍາສຸໂພ ເປັນຜູ້ຢູ່ຮັກສາ ເມືອງ ວຽງຈັນ ຫລື ຂ້າຫລວງໃຫຍ່ ເປັນການຊົ່ວຄາວ ຈົນ ຮອດປີ 1782 "ໂດຍອ້າງວ່າ: ສະຖານະການນັ້ນໄດ້ບີບບັງຄັບ" ເຈົ້າຊີວິດສະຫຍາມ ຈຶ່ງໄດ້ແຕ່ງ ຕັ້ງໃຫ້ ເຈົ້າ ນັນທະເສນ, ພະໂອລົດອົ໋ງກົກ ຂອງເຈົ້າ ສິລິບຸນຍະສານ, ຊຶ່ງເປັນເຈົ້າຊີວິດລາວ ລ້ານຊ້າງວຽງຈັນ ທີ່ມີຖານະເປັນປະເທດສະລາດ ຂອງສັກດິນາສະຫຍາມ, ກ່ອນໝູ່.

ສຳລັບດ້ານການປົກຄອງ ຂອງອານາຈັກລາວ ລ້ານຊ້າງວຽງຈັນນັ້ນ ພວກສະຫຍາມກໍໄດ້ ຈັດແບ່ງເປັນເສນາ ແລະ ພະຍາເມືອງ ເຊັ່ນ: ເອກະເສນາ, ພະຍາເມືອງຂວາ, ເສນາບໍດີຝ່າຍ ຊ້າຍ, ມະຫາເອກະເສນາ, ພະຍາເມືອງຊ້າຍ ເຫລົ່ານີ້ເປັນຕົ້ນ ເພື່ອປົກຄອງແຜ່ນດິນອານາຈັກ ລ້ານຊ້າງ.

ສ່ວນດ້ານການຈັດຕັ້ງກອງທັບນັ້ນ ແມ່ນຂຶ້ນກັບຂ້າຫຼວງສະຫຍາມ ໂດຍກົງ ໃນແຕ່ລະປີ ພວກສັກດິນາສະຫຍາມ ຈະສົ່ງຂ້າຫຼວງມາສຳຫລວດປະຊາກອນ ທີ່ເປັນຊາຍຊະກັນ ສາມາດ ເຂົ້າຮັບໃຊ້ກອງທັບ ແລະ ອອກແຮງງານ ໄດ້ພ້ອມກັນນັ້ນ ກໍກວດກາເບິ່ງຈຳນວນ ພົນລະເມືອງ

ທັງໝົດ ທີ່ຈະຕ້ອງເສຍຊ່ວຍຄ່າຫົວ ເຈົ້າເມືອງລາວທັງປວງ ມີສິດແຕ່ປົກຄອງ ແລະ ເກັບເກນ ເອົາຊາຍຊະກັນ ມາເປັນທະຫານເທົ່ານັ້ນ, ແຕ່ບໍ່ມີສິດຕັ້ງກອງທັບໄດ້.

ຈຸດສຳຄັນອັນໜຶ່ງອີກ ພວກສະຫຍາມມີແຜນນະໂຍບາຍ ເພື່ອສ້າງຄວາມແຕກແຍກໃນໝູ່ສັກດິນາລາວ ແລະ ເພື່ອສິດຜົນປະໂຫຍດອັນຍາວນານ ໃນດ້ານການປົກຄອງຂອງເຂົາ. ຈາກນັ້ນ, ເຂົາກໍໄດ້ເອົາໃຈໃສ່ສົ່ງ ເສີມນະຄອນລາຊະສີມາ ໃຫ້ມີອຳນາດເຂັ້ມ ແຂງຂຶ້ນກວ່າແຕ່ກ່ອນ, ໂດຍໄດ້ຕັດແຍກເອົາຫົວເມືອງຕ່າງໆ ຂອງອານາຈັກ ຈຳປາສັກ ເຊັ່ນ: ເມືອງ ນາລອງ, ເມືອງ ສັງຂະ, ເມືອງ ສຸລິນ ໄປຂຶ້ນກັບ. ພ້ອມກັນນັ້ນ ເຂົາກໍຕັດແຍກເອົາບາງຫົວເມືອງ ທີ່ເປັນສ່ວນໜຶ່ງຂອງນະຄອນວຽງຈັນ ເຊັ່ນ: ເມືອງ ສາກົນນະຄອນ, ເມືອງ ໜອງຫານນ້ອຍ, ເມືອງ ພູວຽງ. ໃຫ້ໄປຂຶ້ນກັບ ນະຄອນລາຊະສີມາ ຕື່ມອີກ ອັນໄດ້ເຮັດໃຫ້ ນະຄອນລາຊະສີມາ ບໍ່ວ່າທາງດ້ານການເມືອງການປົກຄອງ ຫຼື ດ້ານການທະຫານ ມີຄວາມເຂັ້ມແຂງຂຶ້ນ ແລະ ກາຍເປັນປ້ອມດ່ານໜ້າທີ່ໄວ້ເນື້ອເຊື່ອໃຈຂອງເຂົາ.

ນອກຈາກ ເມືອງ ນະຄອນລາຊະສີມາແລ້ວ, ພວກສັກດິນາສະຫຍາມ ໄດ້ຈັດຕັ້ງຂົງເຂດ ເມືອງ ອຸບົນ ຂຶ້ນໃໝ່ອີກ ໂດຍຕັດແຍກເອົາຈາກ ຈຳປາສັກ ແລ້ວແຕ່ງຕັ້ງໃຫ້ບຸກຄົນທີ່ໄວ້ເນື້ອເຊື່ອໃຈ ຫລື ທີ່ເຄີຍຂັດແຍ້ງກັບລາຊະວົງລ້ານຊ້າງ ມາແຕ່ກ່ອນ ເຊັ່ນເຊື້ອສາຍຂອງ ພະວໍລະປີຕາ,ໃຫ້ຂຶ້ນເປັນເຈົ້າເມືອງ ເພື່ອເປັນຫູເປັນຕາໃຫ້ແກ່ສະຫຍາມ ແລະ ເພື່ອເຮັດໃຫ້ສັກດິນາລາວ ແຕກແຍກກັນ ເປັນຫລາຍກົກຫລາຍເຫລົ່າ, ສະດວກໃນການຢຶດຄອງຂອງພວກເຂົາ. ໃນທີ່ສຸດ ບັນດາຫົວເມືອງທັງຫລາຍ ທີ່ແຍກອອກຈາກວຽງຈັນ ແລະ ຈຳປາສັກ ກໍໄດ້ຕົກເປັນຫົວເມືອງຂຶ້ນໂດຍກົງຂອງບາງກອກ, ສ່ວນອານາຈັກວຽງຈັນ ແລະ ຈຳປາສັກ ກໍມີແຕ່ຊຸດໂຊມລົງເລື້ອຍໆ ຍ້ອນພວກເຂົາບັງຄັບ ບໍ່ໃຫ້ສັກດິນາທ້ອງຖິ່ນເໜັງຕີງໄດ້.

2. ການຈັດຕັ້ງປົກຄອງລາວ ໄລຍະທີ 2 ປີ 1829 - 1893.

ເມື່ອສະຫຍາມຮຸກຮານຢຶດໄດ້ປະເທດລາວລ້ານຊ້າງ ທີ່ແຍກກັນເປັນສາມເຈົ້າ ຫລື ສາມອານາຈັກ ໃນປີ 1778, ສະຫຍາມກໍໄດ້ປົກຄອງລາວທັງໝົດ ຕາມວິທີການເມືອງແບບບູຮານ ຄື ຍັງຄົງໃຫ້ມີສັກດິນາທ້ອງຖິ່ນ ຢູ່ຕາມເດີມທຸກໆແຄວ້ນ ຫລື ອານາຈັກ ທີ່ເຂົາຢຶດຄອງໄດ້. ພຽງ ແຕ່ວ່າ ເມື່ອເຖິງຂວບປີມາ ຕ້ອງໃຫ້ນຳເອົາເຄື່ອງບັນນາການເຂົ້າຖວາຍ ຕາມປົກກະຕິຕໍ່ໄປຖ້າ ວ່າມີເສິກສົງຄາມເກີດຂຶ້ນຍາມໃດໃນແຜ່ນດິນ ກໍໃຫ້ຈັດກອງທັບ ໄປຊ່ວຍເທົ່ານັ້ນກໍພໍ.

ຈົນຕໍ່ມາເຖິງປີ 1827 - 1828, ເຈົ້າ ອະນຸວົງ ແຫ່ງອານາຈັກລາວລ້ານຊ້າງວຽງຈັນ ອົດທົນຕໍ່ການຢຽບຫຍາມກຽດ ແລະ ສັກສີ ຕໍ່ເຊື້ອຊາດລາວບໍ່ໄຫວ ຈຶ່ງໄດ້ຕັດສິນໃຈນຳພາຂະບວນລຸກຂຶ້ນຕໍ່ສູ້, ກູ້ເອກະລາດແຫ່ງຊາດແຕ່ບໍ່ສຳເລັດ. ສະຫຍາມຍິ່ງເພີ່ມທະວີການທຳລາຍມ້າງເພ

ຈູດເຜົາ ນະຄອນຫລວງວຽງຈັນ, ກວາດຕ້ອນເອົາຜູ້ຄົນໄປຢູ່ເຂດຝັ່ງຂວາໃຫ້ໝົດ ແລະ ບໍ່ໃຫ້ມີ ເຊື້ອເຈົ້າທ້ອງຖິ່ນປົກຄອງອີກ. ເຊື້ອເຈົ້າລາວລ້ານຊ້າງວຽງຈັນ ຈຶ່ງສູນເສຍອຳນາດ ນັບແຕ່ນັ້ນ ມາ. ສ່ວນເຊື້ອກະສັດລາວ ຫລວງພະບາງ ແລະ ຈຳປາສັກ ຍັງຄົງມີເຊື້ອເຈົ້າທ້ອງຖິ່ນປົກຄອງ ສືບສັນຕະຕິວົງ ຢູ່ຕໍ່ມາແຕ່ໃນສະພາບອ່ອນເພຍ ຈົນເຖິງປີ 1880 ຈຶ່ງເກີດເສິກຫໍ້ ຄືພວກໂຈນ ຫໍ້ຈີນ ແຕກທັບມາຕີປຸ້ນຮຸກຮານເຂົ້າໃນດິນລາວ ຈົນມາເຖິງວຽງຈັນ. ເຖິງປີ 1887 ສະຫຍາມ ຈຶ່ງສາມາດໄລ່ໂຈນ ຈີນຫໍ້ ອອກໄດ້. ເມື່ອເສິກຫໍ້ໄດ້ສະຫງົບລົງແລ້ວ ສະຫຍາມ ຈຶ່ງຈັດການປົກ ຄອງອານາຈັກທັງສາມຄືນໃໝ່ ໂດຍຈັດເປັນ 4 ແຄວ້ນໃຫຍ່ ເພື່ອຈະໄດ້ຄວບຄຸມຫົວເມືອງ ຕ່າງໆ ຢ່າງໃກ້ຊິດເຂົ້າອີກ ແລະ ຮັດກຸມຍິ່ງຂຶ້ນ. ເວລານັ້ນ, ຝຣັ່ງເສດໄດ້ຢຶດເອົາພາກໃຕ້ຫວຽດ ນາມ ຫລື (ໂກແຊງຊິນ) ແລະ ພາກເໜືອ ຫລື (ຕົງແກງ) ເປັນຫົວເມືອງຂຶ້ນໝົດແລ້ວ, ສ່ວນ ພາກກາງຄື ອານາມ ກໍຕົກເປັນລັດຢູ່ໃນຄວາມອາລັກຂາຂອງຝຣັ່ງເສດ. ສ່ວນປະເທດ ຂະເໝນ ທີ່ເປັນຫົວເມືອງຂຶ້ນຂອງສະຫຍາມ ກໍປະກາດຕ້ວຍອມຢູ່ໃນອາລັກຂາ ຂອງລັດຖະບານຝຣັ່ງ ໂດຍບໍ່ບອກໃຫ້ສະຫຍາມຮູ້ເລີຍ. ອີກປະການໜຶ່ງ ອັງກິດ ກໍຢຶດເອົາພະມ້າໄວ້ໃນອຳນາດຂອງ ເຂົາໝົດແລ້ວ, ແຫລມມະລາ ທີ່ຢູ່ທາງທິດໃຕ້ ຂອງປະເທດສະຫຍາມ ກໍຕົກເປັນຂອງອັງກິດ ແລະ ອັງກິດ ຍັງໄດ້ຢຶດເອົາເມືອງຂຶ້ນຂອງສະຫຍາມ ຫລາຍແຫ່ງທາງພາກໃຕ້. ສະຫຍາມຈຶ່ງ ຢ້ານວ່າ ອັງກິດ ແລະ ຝຣັ່ງເສດ ຈະເຂົ້າມາແຊກແຊງຢຶດເອົາຫົວເມືອງລາວຕ່າງໆ ທີ່ສະຫຍາມ ໄດ້ຢຶດເອົາແລ້ວນັ້ນ ໄປເປັນຂອງເຂົາອີກ. ຄວາມຢ້ານກົວນີ້ກໍປະກົດເປັນຈິງ ໃນເວລາຕໍ່ມາຄື ດັ່ງຈະໄດ້ກ່າວໃຫ້ເຫັນໃນບັ້ນຕໍ່ໄປ.

ສະຫຍາມ ໄດ້ແບ່ງປະເທດລາວ ທີ່ເປັນອານາຈັກລາວລ້ານຊ້າງວຽງຈັນ ແລະ ຈຳປາສັກ ອອກເປັນ 4 ແຄວ້ນ ຫລື 4 ພາກ ໃນປີ 1890 ຊຶ່ງເອີ້ນວ່າ: ຫົວເມືອງລາວຝ່າຍຕາເວັນອອກ; ຫົວ ເມືອງລາວ ຝ່າຍຕາເວັນອອກສ່ຽງເໜືອ; ຫົວເມືອງລາວ ຝ່າຍເໜືອ ແລະ ຫົວເມືອງລາວ ຝ່າຍກາງ.

- ຫົວເມືອງລາວຝ່າຍຕາເວັນອອກນີ້ ມີ 6 ເມືອງເອກ ຫລື ເມືອງຊັ້ນໜຶ່ງ ຄື:

1. ຫົວເມືອງເອກ ຄຳທອງໃຫຍ່.
2. ຫົວເມືອງເອກ ເມືອງ ສຸລິນ.
3. ຫົວເມືອງເອກ ເມືອງ ສັງຂະ.
4. ຫົວເມືອງເອກ ເມືອງ ຂຸຂັນ.
5. ຫົວເມືອງເອກ ນະຄອນຈຳປາສັກ.
6. ຫົວເມືອງເອກ ສີທັນດອນ.

ແຕ່ລະເມືອງເອກນັ້ນ ຍັງມີບັນດາເມືອງນ້ອຍຂຶ້ນກັບ.

- ຫົວເມືອງລາວ ຝ່າຍຕາເວັນອອກ ສ່ຽງເໜືອ ມີ 12 ເມືອງເອກ ຄື:

1. ເມືອງເອກ ອຸບົນ.
2. ເມືອງເອກ ຮ້ອຍເອັດ.
3. ເມືອງເອກ ສຸວັນນະພູມ.
4. ເມືອງເອກ ກາລະສິນ.
5. ເມືອງເອກ ມະຫາສາລະຄາມ.
6. ເມືອງເອກ ກົມມະລາໄສ.
7. ເມືອງເອກ ເມືອງ ສີສະເກດ.
8. ເມືອງເອກ ເມືອງ ເຂັມມະລາດ.
9. ເມືອງເອກ ເມືອງ ສອງຄອນດອນດົງ (ສອງຄອນ).
10. ເມືອງເອກ ເມືອງ ນອງ.
11. ເມືອງເອກ ເມືອງ ຍະໂສທອນ.
12. ເມືອງເອກ ເມືອງ ພູແລ່ນຊ້າງ.

- ຫົວເມືອງລາວ ຝ່າຍເໜືອ ມີ 16 ເມືອງເອກ ຄື:

1. ເມືອງເອກ ໜອງຄາຍ.
2. ເມືອງເອກ ຊຽງຂວາງ.
3. ເມືອງເອກ ບໍລິຄັນທະນິຄົມ (ບໍລິຄັນ).
4. ເມືອງເອກ ຄຳມ່ວນ.
5. ເມືອງເອກ ມຸກດາຫານ.
6. ເມືອງເອກ ນະຄອນພະນົມ.
7. ເມືອງເອກ ສະກົນນະຄອນ.
8. ເມືອງເອກ ຂອນແກ່ນ.
9. ເມືອງເອກ ເມືອງ ຫລົ່ມສັກ.
10. ເມືອງເອກ ເມືອງ ບຸລີລຳ.
11. ເມືອງເອກ ເມືອງ ຄຳເກີດ.
12. ເມືອງເອກ ເມືອງ ທ່າອຸເທນ.
13. ເມືອງເອກ ເມືອງ ໄຊບູລີ
14. ເມືອງເອກ ເມືອງ ໂພນພິໄສ.
15. ເມືອງເອກ ເມືອງ ກະມຸດທາໄສ.

24/7 ห้ามจำหน่าย

16. ເມືອງເອກ ເມືອງ ໜອງຫານໃຫຍ່.

16 ເມືອງເອກນີ້ ຂຶ້ນຕໍ່ ກຸງເທບ ໂດຍກົງ, ສະຫຍາມໄດ້ສົ່ງຂ້າຫລວງ ຂຶ້ນມາປົກຄອງຕັ້ງ ສຳນັກງານໃຫຍ່ຢູ່ໜອງຄາຍ, ຂ້າຫລວງຄົນທຳອິດຊື່ວ່າ ພະຍາ ສຸລິເດດ ວິເສດລິດສ່ວນເມືອງ ວຽງຈັນ ເວລານັ້ນ ເປັນເມືອງຮ້າງ ຈັດຢູ່ໃນຊັ້ນຈັດຈະວາ ແລະ ຂຶ້ນກັບ ເມືອງເອກ ໜອງຄາຍ ໂດຍກົງ.

- ຫົວເມືອງລາວ ຝ່າຍກາງ ມີ 3 ເມືອງເອກ ຄື:

1. ເມືອງເອກ ເມືອງ ນະຄອນລາຊະສີມາ.

2. ເມືອງເອກ ເມືອງ ຊົນນະບົດ.

3. ເມືອງເອກ ເມືອງ ພູຊຽວ.

ເມືອງເອກລາວ ຝ່າຍກາງນີ້ ມີຂ້າຫລວງສະຫຍາມຂຶ້ນມາປົກຄອງ ຮຽກວ່າ ຂ້າຫລວງປະ ຈຳຫົວເມືອງລາວຝ່າຍກາງ, ຕັ້ງສຳນັກງານຢູ່ເມືອງ ນະຄອນລາຊະສີມາ, ຄົນທຳອິດຊື່ວ່າ ພະພິ ເຣນທະເທບ.

ຫົວເມືອງລາວ 4 ກອງມີຂ້າຫລວງສະຫຍາມ ປະຈຳຢູ່ກອງລະຄົນ ແລະ ຍັງຂຶ້ນກັບບັງ ຫລວງສູງສຸດ ທີ່ຕັ້ງສຳນັກງານຢູ່ຈຳປາສັກ, ຂ້າຫລວງໃຫຍ່ສຸດຄົນທຳອິດແມ່ນພະຍາ ມະຫາອຳ ນາດທິບໍດີ ນັ້ນເອງ.

ຫົວເມືອງເອກ ທັງ 4 ພາກນີ້ ມີ 42 ເມືອງ ແລະ ຫົວເມືອງຂຶ້ນຂອງເມືອງເອກ ມີ 104 ເມືອງ ທັງໝົດໂຮມເຂົ້າກັນເປັນ 146 ເມືອງ, ມີຄົນລາວເປັນເຈົ້າເມືອງ ແລະ ຮອງເຈົ້າເມືອງຢູ່ ທຸກໆ ເມືອງຕາມລະບຽບການນະຄອນຫລວງຂອງລາວແຕ່ເດີມມາ, ສ່ວນອານາຈັກ ຫລວງພະ ບາງ ຍັງຢູ່ຕາມເດີມບໍ່ໄດ້ໂຮມເຂົ້າເປັນ 4 ກອງນີ້ ແຕ່ກໍມີຂ້າຫລວງສະຫຍາມ ມາຢູ່ເບິ່ງແຍງນຳ ເປັນປະຈຳ.

ຫົວເມືອງລາວ ທັງ 4 ກອງນີ້ ໂຮມກັບອານາຈັກ ຫລວງພະບາງ ສະຫຍາມ ຮຽກວ່າ: **ຫົວ ເມືອງລາວຊັ້ນນອກ**. ສ່ວນຄົນລາວທີ່ຖືກກວາດໄປໃນປາງສົງຄາມ ແລະ ໄປຕັ້ງບ້ານ, ຕັ້ງເມືອງ ຢູ່ລົບບຸລີ, ສະຫລະບຸລີ, ປາຈິນບຸລີ, ເມືອງ ເພັດບຸລີ, ເມືອງ ສຸພັນບຸລີ, ເມືອງ ນະຄອນໄຊສີ, ເມືອງ ລາຊະບຸລີ, ເມືອງ ພະນັດນິຄົມ, ເມືອງ ສະມຸດປາການ, ທັງ 9 ເມືອງນີ້ ສະຫຍາມ ຮຽກ ວ່າ: **ຫົວເມືອງລາວຊັ້ນໃນ.** ສະເພາະພາກສ່ວນທີ່ໄປຢູ່ ເມືອງ ສະມຸດປາການ ນັ້ນແມ່ນ ຄອບ ຄົວຂອງອຸປະລາດ ເມືອງ ນະຄອນພະນົມ ປະມານ 2000 ຄົນ ສະມັກໄປເອງເພາະຜິດ ກັນກັບ ເຈົ້າເມືອງ ນະຄອນພະນົມ ສະຫຍາມ ຈຶ່ງຮຽກວ່າ: **ລາວອາສາ.**

ພາຍຫລັງ ທີ່ໄດ້ແບ່ງປະເທດລາວເຂດວຽງຈັນ ແລະ ຈຳປາສັກ ອອກເປັນ 4 ພາກແລ້ວ 1 ປີ ຕໍ່ມາ (1891) ສະຫຍາມ ກໍໄດ້ແບ່ງເຂດປົກຄອງໃໝ່ອີກ ຄື:

1. ໂຮມເອົາເຂດຫົວເມືອງລາວ ຝ່າຍຕາເວັນອອກ ແລະ ຫົວເມືອງລາວ ຝ່າຍຕາເວັນຕົກສ່ຽງເໜືອ ເຂົ້າເປັນເຂດດຽວ ຮຽກວ່າ: ຫົວເມືອງລາວກາວ, ຫົວເມືອງລາວກາວ ນີ້ເຈົ້າແຜ່ນດິນສະຫຍາມໄດ້ໃຫ້ ພະອະນຸຊາ ຂອງພະອົງ ຊຶ່ ກົມມະຫລວງ ພິຊິດປະລິຊາກອນ ມາເປັນຂ້າຫລວງໃຫຍ່ ຕັ້ງສຳນັກງານຢູ່ທີ່ ເມືອງ ອຸບົນ.

2. ຫົວເມືອງລາວ ຝ່າຍເໜືອ ໄດ້ປ່ຽນເປັນຫົວເມືອງລາວພວນ ເຈົ້າແຜ່ນດິນສະຫຍາມໄດ້ແຕ່ງໃຫ້ ພະອານຸຊາ ຂອງພະອົງມາເປັນຂ້າຫລວງ ມີສຳນັກງານຕັ້ງຢູ່ເມືອງ ໜອງຄາຍ.

3. ໄດ້ໂຮມເອົາອານາຈັກ ຫລວງພະບາງ ຕະຫລອດຮອດ 12 ພັນນາ ລື້ 12 ຈຸ ໄທຫົວພັນ ທັງຫ້າທັງຫົກເຂົ້າກັນເປັນຫົວເມືອງລາວ ຜຸ້ງຂາວ ໂດຍຕັ້ງໃຫ້ ພະຍາ ລິດທິ ລົງລົມນະເສດ ເປັນຂ້າຫລວງ, ສຳນັກງານຕັ້ງຢູ່ນະຄອນຫລວງພະບາງ.

4. ຫົວເມືອງລາວຝ່າຍກາງ ປ່ຽນເປັນຫົວເມືອງລາວກາງ ມີສຳນັກງານຂ້າຫລວງ ຕັ້ງຢູ່ນະຄອນລາຊະສີມາ ກົມມະໜື່ນສັບສິດທິປະສົງເປັນຂ້າຫລວງ.

IV.ການຕໍ່ສູ້ຕ້ານກັບສັກດິນາສະຫຍາມ ຂອງຊາວນະຄອນຫຼວງວຽງຈັນ ພາຍໃຕ້ການນຳພາ ຂອງກະສັດລາວລ້ານຊ້າງວຽງຈັນ ແຕ່ປີ 1779 - 1829.

ແອກປົກຄອງແບບຂູດຮີດຢ່າງປ່າເຖື່ອນ ຂອງພວກສັກດິນາສະຫຍາມ ຄືດັ່ງກ່າວມານັ້ນ ໄດ້ເຮັດໃຫ້ເສດຖະກິດ, ຊີວິດການເປັນຢູ່ ແລະ ສະພາບວັດທະນະທຳ, ສັງຄົມຂອງປະຊາຊົນລາວ ບໍ່ມີການຂະຫຍາຍຕົວ, ມີແຕ່ນັບມື້ຊຸດໂຊມລົງ ອັນໄດ້ເຮັດໃຫ້ປະຊາຊົນລາວ ບັນດາເຜົ່າ ຜູ້ທີ່ມີມູນເຊື້ອຮັກຊາດ, ຮັກອິດສະຫລະພາບ ແລະ ບໍ່ຍອມຈຳນົນ ຍິ່ງເພີ່ມທະວີຈິດໃຈຮັກຊາດ, ຄຸງດແຄ້ນສັດຕູຜູ້ຮຸກຮານ. ຈາກນັ້ນ ຂະບວນສິລະປະວັນນະຄະດີ ກໍມີລັກສະນະຕໍ່ສູ້ທີ່ພົ້ນເດັ່ນຂຶ້ນ ເຊັ່ນ: ສາມລຶບພະສູນ ກໍໄດ້ປະກົດຕົວ ແລະ ຂະຫຍາຍຕົວອອກໃນໄລຍະນັ້ນ. ພ້ອມນັ້ນ, ຂະບວນການຕໍ່ສູ້ ຕ້ານສັກດິນາສະຫຍາມ ຜູ້ມາຮຸກຮານ ແລະ ຢຶດຄອງລາວ ໄດ້ເລີ່ມຂະຫຍາຍຕົວແຮງໃນຫລາຍໆ ທ້ອງຖິ່ນ ເຊັ່ນ: ຂະບວນການຕໍ່ສູ້ນຳໂດຍ ເຈົ້າ ນັນທະເສນ ປີ 1778 - 1779, ຂະບວນການຕໍ່ສູ້ນຳໂດຍ ເຈົ້າ ໂອ, ເຈົ້າ ອິນ ປີ 1780, ຂະບວນການຕໍ່ສູ້ນຳໂດຍອ້າຍ ຊຽງແກ້ວ ປີ 1791, ຂະບວນການຕໍ່ສູ້ນຳໂດຍພະສາຊຽດໂຮ້ງ ປີ 1819 ແລະ ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ພາຍໃຕ້ການນຳພາຂອງ ເຈົ້າ ອະນຸວົງ ປີ 1825 - 1829.

1. ການຕໍ່ສູ້ປ້ອງ ກັນນະຄອນຫລວງວຽງຈັນ ນຳໂດຍເຈົ້າ ສິລິບຸນຍະສານ ແລະ ເຈົ້າ ນັນ ທະເສນ ປີ 1778 -1779.

ປ້ອມດ່ານໜ້າປ້ອງກັນ ການຮຸກຮານຂອງສັກດິນາສະຫຍາມ ຂອງອານາຈັກລາວລ້ານ ຊ້າງວຽງຈັນ ໃນເວລານັ້ນແມ່ນ ເມືອງ ຫາດຊາຍຟອງ. ເມື່ອກອງທັບສະຫຍາມບຸກເຂົ້າມາຍາມ ໃດກໍພົບກັບການຕໍ່ສູ້ຕ້ານຄືນຢ່າງໜຽວແໜ້ນ, ຍ້ອນຈິດໃຈຮັກຊາດ, ຮັກອິດສະລະພາບບໍ່ຍອມ ຈຳນົນຂອງກອງທັບ ແລະ ປະຊາຊົນຊາວວຽງຈັນ. ເຖິງແມ່ນວ່າກຳລັງສູ້ຮົບຈະມີໜ້ອຍກວ່າ, ອາວຸດກໍເປັນແບບພື້ນເມືອງ, ທຽບກັນບໍ່ໄດ້ກັບຂອງສະຫຍາມ ທີ່ທັນສະໄໝກວ່າ ແຕ່ກໍຍັງສາ ມາດຕ້ານການບຸກລຸກຂອງສະຫຍາມ, ຮັກສານະຄອນຫລວງວຽງຈັນ ໄວ້ໄດ້ເຖິງ 4 ເດືອນກວ່າ. ເມື່ອກອງທັບສະຫຍາມ ບໍ່ສາມາດຢຶດ ນະຄອນຫລວງວຽງຈັນ ຕາມຄວາມຄາດຄະເນໄວ້ຂອງ ແມ່ທັບຄືແນວນັ້ນ, ສະຫຍາມ ຈຶ່ງສັ່ງໃຫ້ກອງທັບເຮືອ ລຳລຽງເອົາທະຫານ ທີ່ຢູ່ຝັ່ງໜອງຄາຍ, ວຽງຄຸກ ແລະ ວຽງພະໂຄມາ ເພີ່ມຕື່ມ. ສ່ວນກອງທັບ ວຽງຈັນ ເມືອງ ຊາຍຟອງ ເຫັນຝ່າຍຂ້າ ເສິກ ສົ່ງກຳລັງມາເພີ່ມຕື່ມເລື້ອຍໆ, ເຫັນຈະປ້ອງກັນຕົວເມືອງໄວ້ບໍ່ໄດ້, ຈຶ່ງສັ່ງໃຫ້ອົບພະຍົບ ຄອບຄົວປະຊາຊົນ ເຂົ້າໄປຢູ່ໃນກຳແພງນະຄອນວຽງຈັນ, ປະໃຫ້ແຕ່ທະຫານເທົ່ານັ້ນທີ່ທຳການ ສູ້ຮົບຢູ່ຂ້າງນອກ ຈົນສຸດຄວາມສາມາດແລ້ວ ຈຶ່ງຖອຍມາສົມທົບກັບກຳລັງປ້ອງກັນ ນະຄອນ ຫລວງວຽງຈັນ ຢູ່ເຂດນອກ, ຫຼັງຈາກນັ້ນ ພວກສະຫຍາມ ກໍແຈກຢາຍກຳລັງອອກໄປ ຕັ້ງຢູ່ດ້ານ ຕາເວັນອອກ ຂອງນະຄອນວຽງຈັນ.



ເຈົ້າ ສິລິບຸນຍະສານ
ຂຶ້ນຄອງລາຊະສົມບັດ
ປີ 1730

ເຈົ້າ ສິລິບຸນຍະສານ ແຫ່ງອານາຈັກວຽງຈັນ ໄດ້ມອບໜ້າທີ່ ຈັດການປ້ອງກັນນະຄອນຫລວງວຽງຈັນ ໃຫ້ເຈົ້າ ມະຫາອຸປະຣາດ ນັນທະເສນ ຜູ້ເປັນລູກຊາຍ ຈົນເຖິງຂັ້ນສຸດທ້າຍ ເຈົ້າ ນັນທະເສນ ໄດ້ຈັດຕັ້ງທະຫານເຂົ້າປະຈຳຕາມ ກຳແພງເມືອງ ທັງສອງຊັ້ນ, ໂດຍ ສະເພາະ ກຳແພງວຽງຈັນ ຊັ້ນໃນ ຖືວ່າສຳຄັນທີ່ສຸດ, ພະອົງ ໄດ້ນຳການຕໍ່ສູ້ກັບກອງທັບຫລວງ ຂອງສະຫຍາມເປັນ ເວລາ 4 ເດືອນກ່ວາ, ສ່ວນກອງທັບສະຫຍາມ ກໍໄດ້ຮັບຄວາມເສຍຫາຍ ແລະ ບາດເຈັບລົ້ມຕາຍໃນ ແຕ່ລະວັນເປັນຈຳນວນຫລວງຫລາຍ.

ເຈົ້າ ສິລິບຸນຍະສານ ແຫ່ງແຜ່ນດິນອານາຈັກວຽງຈັນ ເມື່ອ ຄົ້ນຄ້ວາສະພາບການ ຂອງນະຄອນວຽງຈັນ ໃນເວລານັ້ນ ແລ້ວກໍ ເຫັນວ່າ ວຽງຈັນ ບໍ່ຕ່າງຫຍັງກັບ “ ເຕົ່າທີ່ກຳລັງຫົດຕົວຢູ່ໃນອອງ ” ບໍ່ກ້າຍື່ນຫົວອອກມານອກ ໄດ້, ຖ້າວ່າຍື່ນອອກກໍຈະຖືກຕີຫົວໂລດ ແລະ ຖ້າຢືນຢັນຕໍ່ສູ້ຕໍ່ໄປ ກໍມີແຕ່ຈະນຳຄວາມເດືອດ

ຮ້ອນ ເສື່ອມເສຍມາສູ່ປະຊາຊົນ ແລະ ຕົນເອງ ກໍຈະຖືກຈັບເປັນຊະເລີຍເສິກ, ຖືກສະຫຍາມທໍລະມານຢ່າງແນ່ນອນ. ດັ່ງນັ້ນ, ຈົ່ງຫາທາງລັກໜີຈາກວຽງຈັນໃນເວລາກາງຄືນ ພ້ອມດ້ວຍຄອບຄົວ ແລະ ຄົນໃກ້ຊິດຈຳນວນໜຶ່ງ ໂດຍການໃຊ້ເຮືອເປັນພາຫະນະ ລ່ອງໄປຕາມແມ່ນ້ຳຂອງມຸ້ງໜ້າເຂົ້າສູ່ ເມືອງ ຄຳເກີດ ໂດຍບໍ່ໃຫ້ ເຈົ້າ ນັນທະເສນ ຮູ້ເລີຍ.

ໃນເວລາທີ່ກອງທັບ ແລະ ປະຊາຊົນ ຊາວວຽງຈັນ ພາຍໃຕ້ການບັນຊາຂອງ ເຈົ້າ ນັນທະເສນ ແລະ ເຈົ້າ ວັງໜ້າ ພວມນຳພາການຕໍ່ສູ້ ຕ້ານການຮຸກຮານຂອງສະຫຍາມ ຢູ່ຢ່າງອົງອາດກ້າຫານນັ້ນ, ກໍໄດ້ຮູ້ຂ່າວວ່າ ເຈົ້າ ສິລິບຸນຍະສານ ຜູ້ເປັນພະບິດາ ໄດ້ລົບໜີຈາກນະຄອນຫລວງໄປແລ້ວ ອັນໄດ້ເຮັດໃຫ້ສະພາບກຳລັງໃຈລົດນ້ອຍຖອຍລົງ. ເຖິງຢ່າງໃດກໍຕາມ ການສູ້ຮົບຕ້ານການບຸກຢຶດ ແລະ ຮຸກຮານຂອງສັກດິນາສະຫຍາມ ກໍຍັງດຳເນີນຕໍ່ໄປ ແລະ ສາມາດຮັກສານະຄອນຫລວງວຽງຈັນ ໄວ້ໄດ້ຫລາຍເດືອນ.

2. ຂະບວນການຕໍ່ສູ້ ຂອງຊາວນະຄອນຫຼວງວຽງຈັນ ພາຍໃຕ້ການນຳພາຂອງເຈົ້າ ນັນທະເສນ ເພື່ອຍາດເອົາຄວາມເປັນເອກະລາດ (1782 - 1794).

ເຈົ້າ ນັນທະເສນ ແມ່ນໂອລົດອົງໃຫຍ່ຂອງ ເຈົ້າ ສິລິບຸນຍະສານ, ຂຶ້ນປົກຄອງອານາຈັກລ້ານຊ້າງວຽງຈັນ ປີ1782. ກ່ອນນັ້ນ ໃນປີ 1779 ເພິ່ນເຄີຍໄດ້ນຳພາກອງທັບ ແລະ ປະຊາຊົນ ຕໍ່ສູ້ປ້ອງກັນ ນະຄອນຫລວງວຽງຈັນ ຢ່າງເຕັມຄວາມສາມາດ, ແຕ່ໄດ້ປະລາໄຊ ໃຫ້ແກ່ກອງທັບໃຫຍ່ສະຫຍາມ ແລະ ຖືກຈັບເປັນຊະເລີຍເສິກຈົ່ງໄປທົນບູລີ. ຕໍ່ມາ ເຈົ້າ ຕາກສິນ ໄດ້ແຕ່ງຕັ້ງ ເຈົ້າ ນັນທະເສນ ໃຫ້ປົກຄອງ ວຽງຈັນ ແທນພະບິດາ. ແຕ່ຍ້ອນເຫດການກໍ່ການກະບົດລົ້ມລາຊະບັນລັງ ເຈົ້າ ຕາກສິນ, ເຈົ້າ ນັນທະເສນ ຈົ່ງຍັງບໍ່ໄດ້ມາປົກຄອງວຽງຈັນອີກ. ພາຍຫລັງພວກກະບົດນຳໂດຍ ພະຍາມະຫາກະສັດເສິກ ໄດ້ປະຫານຊີວິດ ເຈົ້າ ຕາກສິນ ໃນວັນທີ 6 ເດືອນ 4 ປີ 1782 ແລ້ວກໍ່ຕັ້ງຕົນເປັນເຈົ້າຊີວິດ, ໂດຍໃຊ້ນາມມະຍົດວ່າ: “ ສົມເດັດພຸດທະຍອດຟ້າຈຸລາໂລກ ” ຈາກນັ້ນ ເຂົາໄດ້ ຫັນມາແກ້ໄຂບັນຫາຢູ່ນະຄອນຫລວງວຽງຈັນ,



ເຈົ້ານັນທະເສນ ພິງມະລາວ ຂຶ້ນເປັນເຈົ້າອານາຈັກ ລ້ານຊ້າງວຽງຈັນ ປີ 1780

ເນື່ອງຈາກວ່າ ເຈົ້າ ສິລິບຸນຍະສານ ທີ່ໄດ້ຍົກກອງທັບຈາກ ເມືອງ ຄຳເກີດ ມາຢຶດເອົາວຽງຈັນຄືນ ໃນຕົ້ນປີ 1780, ພວມລົ້ມປ່ວຍຢ່າງໜັກ, ພວກເຂົາຈົ່ງໄດ້ຮີບ ຕັ້ງໃຫ້ເຈົ້າ ນັນທະເສນ ເປັນເຈົ້າຊີວິດອານາຈັກ ລ້ານຊ້າງວຽງຈັນ ແທນອົງພະບິດາແລ້ວ ໃຫ້ ຮີບຍົກກອງທັບຂຶ້ນມາ ວຽງຈັນ

ໂດຍມີຂ້າຫລວງສະຫຍາມ ຂຶ້ນມານຳ ໃນໂອກາດນີ້ ເຈົ້າ ນັນທະ ເສນ ໄດ້ຂໍເອົາ ພະບາງ ຄືນ ມານຳດ້ວຍ.

ເມື່ອມາຮອດວຽງຈັນແລ້ວ, ເຈົ້າ ນັນທະເສນ ກໍໄດ້ເຂົ້າເຝົ້າເຈົ້າ ສິລິບຸນຍະສານ ຜູ້ເປັນບິ ດາ ແລະ ລາຍງານໃຫ້ຊາບເລື່ອງລາວທຸກຢ່າງ. ເຈົ້າ ສິລິບຸນຍະສານ ໄດ້ອະນຸຍາດໃຫ້ ເຈົ້າ ນັນ ທະເສນ ພ້ອມທັງໄພ່ພົນເຂົ້າພັກຢູ່ນະຄອນຫລວງວຽງຈັນ, ຍ້ອນເຈົ້າ ສິລິບຸນຍະສານ ເຈັບປ່ວຍ ຢ່າງໜັກມາດົນແລ້ວ ຈຶ່ງສິ້ນພະຊົນໃນປີນັ້ນເອງ. ເຈົ້າ ນັນທະເສນ ຈຶ່ງໄດ້ເປັນເຈົ້າຊີວິດລາວ ລ້ານຊ້າງວຽງຈັນໂດຍສົມບູນ. ພາຍຫຼັງຈົບພິທີປົງສົບ ເຈົ້າ ສິລິບຸນຍະສານ ແລ້ວ, ເຈົ້າ ນັນທະ ເສນ ກໍໄດ້ຄິດວາງແຜນກອບກູ້ເອກະລາດ ໃຫ້ແກ່ລາວລ້ານຊ້າງໂລດ. ແຕ່ເພື່ອລອງຕາວ່າໂຕ ຍັງຈຶ່ງຮັກພັກດີ ແລະ ເປັນເຈົ້າຂອງປະເທດສະລາດ ຂອງສະຫຍາມຢ່າງແທ້ຈິງນັ້ນ, ເຈົ້າ ນັນ ທະເສນ ໄດ້ສັ່ງ " ເຈົ້າ ອິນ, ເຈົ້າ ພົມ ແລະ ເຈົ້ານ້ອງທ້າວ " ລົງໄປ ບາງກອກ ແລ້ວແຕ່ງຕັ້ງ ໃຫ້ ເຈົ້າ ແກ້ວ ເປັນເຈົ້າມະຫາອຸປະຣາດ.

ໃນການປະຕິບັດແຜນການກອບກູ້ເອກະລາດ ໃຫ້ແກ່ອານາຈັກ ລາວລ້ານຊ້າງນັ້ນ ເຈົ້າ ນັນທະເສນ ໄດ້ກຳນົດພາລະກິດທີ່ໜັກໜ່ວງ 3 ປະການໄປພ້ອມກັນ ຄື: ນຶ່ງ ບູລະນະສ້າງສາ ປົວແປງບ້ານເມືອງຄືນໃໝ່. ສອງ ພະຍາຍາມທ້ອນໂຮມແຜ່ນ ດິນລາວລ້ານຊ້າງ ໃຫ້ເປັນເອກະ ພາບກັນ. ສາມດຳເນີນນະໂຍບາຍຕ່ ສັກດິນາສະຫຍາມໄປພ້ອມກັນ ເພື່ອປົດບັງແຜນການ ກອບກູ້ເອກະລາດຂອງຕົນ.

ໃນແຜນການບູລະນະສ້າງສາ ແລະຈັດຕັ້ງການປົກຄອງອານາຈັກລາວລ້ານຊ້າງຄືນໃໝ່, ນີ້ຖືວ່າ ເປັນວຽກງານໜຶ່ງທີ່ສຳຄັນ, ເພາະມັນສະແດງເຖິງຄວາມຮັກຊາດ, ຮັກບ້ານເກີດເມືອງ ນອນ ແລະ ຄວາມສາມັກຄີຕື່ນຕົວຂອງປະຊາຊົນ ເພື່ອກຽມພ້ອມຍາດເອົາເອກະລາດຄືນມາ. ກ່ອນອື່ນໝົດ ແມ່ນການສ້ອມແປງ ກຳແພງເມືອງວຽງຈັນ ທີ່ກອງທັບສະຫຍາມ ໄດ້ທຳລາຍ ໃນປີ 1779 ນັ້ນ, ໃຫ້ຄືນສູ່ສະພາບເດີມ ໂດຍເຈົ້າ ນັນທະເສນ ໄດ້ຈັດຕັ້ງນຳພາການສ້ອມແປງ ດ້ວຍຕົນເອງ. ພ້ອມດຽວກັນນີ້ ເຈົ້າ ນັນທະເສນ ຍັງໄດ້ສັ່ງໃຫ້ສ້ອມແປງກຳແພງເມືອງ ແລະ ປ້ອມສູ້ຮົບຢູ່ຫົວເມືອງຊັ້ນນອກ ອີກຫຼາຍເມືອງສຳຄັນທີ່ສຸດໄດ້ແກ່ ເມືອງ ຫານນ້ອຍ, ເມືອງ ພູ ວຽງ ແລະ ເມືອງ ພູຊຽວ ອັນເປັນເມືອງປາຍດ່ານ ຂອງອານາຈັກລ້ານຊ້າງ ທາງດ້ານຕາເວັນຕົກ ທີ່ໄດ້ຖືກທຳລາຍ ຈົນກາຍເປັນເມືອງຮ້າງ. ເພື່ອປະຕິບັດວຽກງານດັ່ງກ່າວນັ້ນ ເຈົ້າ ນັນທະເສນ ຈຶ່ງໄດ້ແຕ່ງຕັ້ງທ້າວມາຊາວ, ເມືອງ ພານພູຊົນ ໃຫ້ໄປຄອງເມືອງ ເພື່ອເປັນຫູເປັນຕາທາງດ້ານ ຕາເວັນຕົກ ແລະ ໃຫ້ເອົາໃຈໃສ່ສ້ອມແປງປ້ອມສູ້ຮົບ ແລະ ກຳແພງເມືອງ ໃຫ້ຮຽບຮ້ອຍໄປ ພ້ອມ, ທັງດູແລສອດສ່ອງທຸກວຽກງານ ດ້ານຕາເວັນຕົກ, ທັງນຳພາ ປຸກລະດົມຈິດໃຈຮັກຊາດ

ກຽມພ້ອມ ເພື່ອຕໍ່ສູ້ຍາດເອົາເອກະລາດຄືນມາ. ພະໄກສີຫາລາດ ພ້ອມດ້ວຍເພຍເທບ, ແສນໂຮມ, ແສນສຸກ, ໝື່ນພິນ ແລະ ເພຍນາມວົງ ໄດ້ນຳພາຄອບຄົວ ແລະ ໄພ່ພົນຫຼາຍໝື່ນຄົນໄປສ້ອມແປງ ເມືອງ ພູຂຽວ ແລະ ຮັບຜິດຊອບວຽກງານທີ່ ເຈົ້າ ນັນທະເສນ ມອບໝາຍໃຫ້.

ໃນການທ້ອນໂຮມແຜ່ນດິນລາວລ້ານຊ້າງເປັນເອກະພາບ, ການທີ່ຈະກອບກູ້ເອກະລາດຄືນ ຈາກສັກດິນາສະຫຍາມຜູ້ຮຸກຮານ ແລະ ຢຶດຄອງທີ່ມີກຳລັງເໜືອກວ່ານັ້ນ, ລຳພັງແຕ່ອານາຈັກ ລ້ານຊ້າງວຽງຈັນ ແມ່ນເຮັດບໍ່ໄດ້, ສະນັ້ນ, ຈຳເປັນຕ້ອງທ້ອນໂຮມອານາຈັກລາວລ້ານຊ້າງໃຫ້ເປັນປຶກແຜ່ນແໜ້ນໜ້າເສຍກ່ອນ; ອັນນີ້ຖືວ່າ ແມ່ນວຽກງານທີ່ສັບສົນ ແລະ ຫຍຸ້ງຍາກທີ່ສຸດ, ເພາະຄວາມແຕກແຍກຂອງອານາຈັກລ້ານຊ້າງ ນັ້ນແມ່ນມີມາແຕ່ດົນນານແລ້ວ. ແຕ່ເຖິງຈະຫຍຸ້ງຍາກພຽງໃດກໍຕາມ, ເຈົ້າ ນັນທະເສນ ກໍໄດ້ຕັດສິນໃຈຈະທ້ອນໂຮມເອົາແຄວ້ນ ພວນ ຊຽງຂວາງ, ອານາຈັກ ຫລວງພະບາງ ແລະ ອານາຈັກ ຈຳປາສັກ ເຂົ້າມາຮ່ວມກັນໃຫ້ໄດ້.

ແຜນການຂັ້ນຕົ້ນນີ້ແມ່ນຈະທ້ອນໂຮມ ເອົາແຄວ້ນພວນຊຽງຂວາງ, ແຂວງ ຫົວພັນ ແລະ ສິບສອງຈຸໄທ, ແຜນການຂັ້ນທີສອງ ແມ່ນທ້ອນໂຮມເອົາ ຫຼວງພະບາງ ແລະ ແຜນການຂັ້ນທີສາມ ແມ່ນທ້ອນໂຮມເອົາ ຈຳປາສັກ. ເມື່ອສຳເລັດຜົນຕາມແຜນການທັງ 3 ຂັ້ນນັ້ນ ແລ້ວເຈົ້າ ນັນທະເສນ ຈຶ່ງຈະນຳພາປະຊາຊົນລາວ ປະກາດເອກະລາດ ບໍ່ຍອມເປັນຫົວເມືອງຂຶ້ນ ຂອງສັກດິນາສະຫຍາມ ຕໍ່ໄປ.

ໃນປີ 1783 ໄດ້ມີເຫດການອຳນວຍໃຫ້ ເຈົ້າ ນັນທະເສນ ປະຕິບັດແຜນການເບື້ອງຕົ້ນຂອງເພີ່ນໄດ້, ຍ້ອນສັກດິນາດ້າຍຫວຽດ ເອີ້ນວ່າ ສັກດິນາ ໄຕເຊີນ ໄດ້ສົ່ງກອງທັບໃຫຍ່ມາປົກຄອງລາວ, ເພື່ອບໍ່ໃຫ້ດິນແດນລາວ ຕົກເປັນຂອງສະຫຍາມ ແຕ່ຝ່າຍດຽວ ພວກເຂົາຈຶ່ງສົ່ງໃຫ້ ກວາມລັບ ເປັນແມ່ທັບນຳກອງທັບຈາກ ເມືອງ ງອານ ເຂົ້າມາສົມທົບກັບກຳລັງສັກດິນາທ້ອງຖິ່ນ - ລາວ ເພື່ອເຂົ້າມາຢຶດຄອງແຄວ້ນພວນຊຽງຂວາງ. ເມື່ອກອງທັບຂອງສັກດິນາດ້າຍຫວຽດ ມາຮອດ ເມືອງ ເຄີງ (ທີ່ໂດນພູໝ້າຍ) ເຈົ້າ ຊິມພູ ເຈົ້າຄອງແຄວ້ນພວນຊຽງຂວາງ ເຫັນກຳລັງ ຂອງ ກວາມລັບ ມີຈຳນວນຫລາຍກວ່າ ເຫັນວ່າຈະສູ້ບໍ່ໄດ້ ສະນັ້ນ ເຈົ້າ ຊິມພູ ຈຶ່ງຂໍກຳລັງ ວຽງຈັນ ໄປຊ່ວຍ ເຈົ້າ ນັນທະເສນ ຈຶ່ງສົ່ງກອງທັບຂຶ້ນໄປຊ່ວຍ ເຈົ້າ ຊິມພູ ຂັບໄລ່ກອງທັບສັກດິນາດ້າຍຫວຽດ ໃຫ້ແຕກ ກະແຈກກະຈາຍໄປແລ້ວ ແຄວ້ນພວນຊຽງຂວາງ ກໍຂຶ້ນກັບວຽງຈັນ.

ພາຍຫຼັງທີ່ ເຈົ້າ ນັນທະເສນ ສາມາດທ້ອນໂຮມເອົາອານາຈັກລາວ ຫຼວງພະບາງ, ແຄວ້ນພວນຊຽງຂວາງ, ແຂວງ ຫົວພັນ ແລະ ແຄວ້ນສິບສອງຈຸໄທ ໃຫ້ເປັນອັນໜຶ່ງດຽວກັນກັບ ວຽງຈັນໄດ້ແລ້ວ, ແຜນການຂັ້ນຕໍ່ໄປແມ່ນສືບຕໍ່ຮ່ວມມືກັບ ພະບໍລົມ ມະລາຊາພົມມາ ແລະ ບັນດາ ສັກດິນາລາວ ນ້ອຍໃຫຍ່ທັງປວງ ຕະຫລອດຮອດປະຊາຊົນລາວ ທຸກຖ້ວນໜ້າ ໃຫ້ສາມັກຄີກັນ

ທ້ອນໂຮມເອົາອານາຈັກ ຈຳປາສັກ ໃຫ້ແລ້ວ ຈະປະກາດເອກະລາດບໍ່ຂຶ້ນກັບ ບາງກອກ ຕໍ່ໄປ. ແຕ່ແຜນການຍັງບໍ່ທັນສຳເລັດເທື່ອ ກໍຕ້ອງພົບອຸປະສັກອັນໃຫຍ່ຫຼວງ, ຍ້ອນວ່າພາຍຫຼັງທີ່ກອງທັບໃຫຍ່ສະຫຍາມປະລາໄຊໃຫ້ແກ່ສັກດິນາພະມ້າ ທີ່ສົງຄາມຢູ່ ເມືອງ ທະວາຍ ແລ້ວກໍໄດ້ຮູ້ຂ່າວວ່າ ເຈົ້າ ນັນທະເສນ ປະສົບຜົນສຳເລັດໃນການເຮັດສົງຄາມ ຕ້ານກອງທັບສັກດິນາ ດ້ວຍທ່ວງດ ທີ່ສະໜາມຮົບແຄ້ວນພວນຊຽງຂວາງ ແລະ ທີ່ນະຄອນພະນົມ ແລະ ອານາເຂດຂອງອານາຈັກລ້ານຊ້າງວຽງຈັນ ກໍໄດ້ຂະຫຍາຍຕົວອອກຕື່ມ ກວມເອົາເຂດຫລວງພະບາງ, ແຄ້ວນພວນຊຽງຂວາງ, ແຂວງ ຫົວພັນ ແລະ ເຂດສິບສອງຈຸໄທ ທັ້ງຊື່ສຽງຂອງ ເຈົ້າ ນັນທະເສນ ແຫ່ງອານາຈັກລ້ານຊ້າງວຽງຈັນ ກໍປາກົດພົ້ນເດັ່ນຂຶ້ນ ຈຶ່ງເຮັດໃຫ້ພວກສັກດິນາສະຫຍາມເກີດຄວາມບໍ່ພໍໃຈ ແລະ ເກີດຄວາມລະແວງສົງໄສໃນພຶດຕິກຳ ຂອງເຈົ້າຊີວິດລ້ານຊ້າງວຽງຈັນ, ໂດຍສະເພາະ ການທ້ອນໂຮມເອົາ ຫຼວງພະບາງ, ຊຽງຂວາງ, ຫົວພັນ ແລະ ສິບສອງຈຸໄທ ເຂົ້າກັບ ວຽງຈັນ ນັ້ນແມ່ນເປັນສິ່ງທີ່ພວກສັກດິນາສະຫຍາມບໍ່ຕ້ອງການທີ່ສຸດ. ພວກເຂົາຖືວ່າການເຮັດແນວນັ້ນ ແມ່ນຝ່າຝືນຄຳສັ່ງຂອງບາງກອກ, ພວກເຂົາມີແຕ່ຕ້ອງການໃຫ້ບັນດາຫົວເມືອງລາວ ທັ້ງໝົດແຕກແຍກກັນ ແລະ ຂັດແຍ້ງກັນເພື່ອສະດວກໃນການປົກຄອງ ແລະ ກົດຂີ່ຂູດຮີດຂອງພວກເຂົາ, ດັ່ງນັ້ນ ພວກສັກດິນາສະຫຍາມ ຜູ້ໂລບມາກໂລພາໄຝ່ຝັນຢາກເປັນໃຫຍ່ທົ່ວແຫຼມສຸວັນນະພູມ ເມື່ອພວກເຂົາໄດ້ປະສົບກັບການພ່າຍແພ້ໃນການຢຶດຄອງມອນ ແລະ ພະມ້າ ກັບມາແລ້ວ ພັດໄດ້ຍິນຂ່າວຄວາມເຂັ້ມແຂງຂອງ ເຈົ້າ ນັນທະເສນ, ພວກເຂົາຈຶ່ງບໍ່ພໍໃຈຍ້ອນ ຢ້ານອານາຈັກລ້ານຊ້າງ ແຍກອອກເປັນເອກະລາດ ແລະ ໃນປີນັ້ນເອງ (1794) ມີຜູ້ຟ້ອງວ່າ ເຈົ້ານັນທະເສນ ເຈົ້າຄອງ ນະຄອນວຽງຈັນ ກັບພະບໍລົມ ມະລາຊາ ເຈົ້າເມືອງ ນະຄອນພະນົມ ຄົບຄິດກັນເປັນກະບົດ ຈຶ່ງເຮັດໃຫ້ເຈົ້າຊີວິດສະຫຍາມຂັດເຄືອງໃຈຫຼາຍ.

ເຈົ້າ ນັນທະເສນ ແລະ ພະບໍລົມ ມະລາຊາ ເມື່ອໄດ້ຮັບຮູ້ເນື້ອໃນ ຂອງລາຊະສານນັ້ນແລ້ວ ຈຶ່ງຄິດວ່າແຜນກອບກູ້ເອກະລາດ ຂອງພວກຕົນຍັງປິດເປັນຄວາມລັບຢູ່ຍັງບໍ່ທັນພ່າຍແພ້ເທື່ອ ແລະ ຍັງບໍ່ທັນລົງມືປະຕິບັດສຳເລັດຜົນ, ສ່ວນການໂຈມຕີ ຫຼວງພະບາງ ແລະ ການຕໍ່ສູ້ຕ້ານການຮຸກຮານຂອງດ້ວຍທ່ວງດນັ້ນ ກໍແມ່ນໄດ້ຮັບຮູ້ຈາກສະຫຍາມກ່ອນແລ້ວ. ດັ່ງນັ້ນ, ຈຶ່ງຄິດວ່າພວກຕົນຈະພໍສູ້ຄະດີໄດ້ຢູ່ ຫລື ຖ້າຈະປະກາດເອກະລາດໃນຄາວນີ້ໂລດ ກໍຍັງບໍ່ພ້ອມ ເພາະທ້ອນໂຮມເອົາ ຈຳປາສັກ ຍັງບໍ່ທັນໄດ້ເທື່ອ ແລະ ສັກດິນາລາວ ກໍຍັງບໍ່ທັນລວມສູນເທື່ອ ໂດຍສະເພາະ ກອງທັບໃຫຍ່ສະຫຍາມ ກໍກັບມາແຕ່ທະວາຍແລ້ວ ຖ້າພວກເຂົາຍົກມາຕີລາວ ໃນຕອນນີ້ ກໍຈະເຮັດໃຫ້ຝ່າຍລາວປະລາໄຊ, ດັ່ງນັ້ນ ເມື່ອຊັ່ງຊາສະພາບການລວມແລ້ວ ຜູ້ນຳລາວທັ້ງສອງ ຈຶ່ງຍອມໃຫ້ຈັບເພື່ອລົງໄປສູ້ຄະດີຢູ່ບາງກອກ.

ເຈົ້າ ນັນທະເສນ ແລະ ພະບໍລິມ ມະລາຊາພິມມາ ພ້ອມດ້ວຍເສນາອາມາດຄົນສຳຄັນ ຈຳນວນໜຶ່ງ ໄດ້ຖືກຈັບເປັນຊະເລີຍລົງໄປ ບາງກອກ ໃນທ້າຍປີ 1794. ເມື່ອລົງໄປຮອດ ບາງ ກອກ ແລ້ວ, ພວກເພິ່ນຖືກກ່າວຫາວ່າເປັນ " ກະບົດ " ເຈົ້າ ນັນທະເສນ " ຕ້ອງຖືກຖອດອອກ ຈາກຕຳແໜ່ງ ໃນປີ 1794 ເພາະຄົບຄິດກັບ ພະບໍລິມ ມະລາຊາພິມມາ ເຈົ້າເມືອງ ນະຄອນພະ ນົມ ຈະປະກາດ ເມືອງລ້ານຊ້າງວຽງຈັນ ເປັນອິດສະຫຼະພາບ ". ໄດ້ມີການຈັດຕັ້ງໂຈດຟ້ອງຕໍ່ ເຈົ້າຊີວິດສະຫຍາມ, ຜົນປະກົດວ່າພວກເພິ່ນ ໄດ້ຖືກບັງຄັບໃຫ້ຍອມຮັບສາລະພາບວ່າ ໄດ້ວາງ ແຜນກູ້ເອກະລາດແທ້ ບໍ່ແມ່ນວ່າຫາກໍຄິດຂຶ້ນມໍ່ໆນີ້ທໍ່ນັ້ນ ແຕ່ດຳເນີນການມາແຕ່ດົນນານແລ້ວ ດັ່ງນັ້ນ ພວກເພິ່ນຈຶ່ງຖືກເຈົ້າຊີວິດສະຫຍາມ ສັ່ງໃຫ້ລົງໂທດເຖິງປະຫານຊີວິດ. ແຕ່ຍ້ອນເປັນອຸ ບາຍ ທາງການເມືອງອັນເລິກແລບ ຂອງສັກດິນາສະຫຍາມ ເພື່ອໝູ່ອກລວງ ປະຊາຊົນລາວ ໃຫ້ ເຂົ້າໃຈວ່າພວກຕົນເປັນຜູ້ມີທິດສະພິລາຊະທຳ 10 ປະການ, ເຈົ້າວັງໜ້າ ຂອງສະຫຍາມ ຈຶ່ງທຳ ກົນອຸບາຍໃຫ້ເຈົ້າຊີວິດສະຫຍາມ ຜ່ອນໂທດ ລົງມາເປັນການຈຳຄຸກ ແລະ ໃຫ້ຖືກຂ້ຽນຕີ 100 ບາດ ມາຮອດ ປີ 1795 ເດືອນ 8 ຂຶ້ນ 14 ຄ่ำ ສົມເດັດ ພະອະນຸຊາທິລາດ ອົງພະລາຊະວັງ ບໍ ວອນ ສະຖານມຸງຄຸນ ສະເດັດລົງມາເຝົ້າຂາບຖວາຍບັງຄົມລາທົ່ງພະນວດ (ລາບວດ) ແລະ ຂໍ ຮັບພະລາຊະທານໂທດ ເຈົ້າ ນັນທະເສນ ນະຄອນລ້ານຊ້າງ ທີ່ຕ້ອງໂທດກັບສະມັກພັກພວກ ເຈົ້າ ນັນທະເສນ ແລະ ບັນດານັກໂທດທີ່ຕ້ອງພັນທະນາການຢູ່ຄຸກ ໃຫ້ພົ້ນໂທດຂາບທູນຂໍເວັ້ນ ແຕ່ເຈົ້າ ນັນທະເສນ ແລະ ພັກພວກຊຶ່ງເປັນກະບົດ ເຈົ້າ ນັນທະເສນ ໄດ້ຖືກທໍລະມານຢູ່ໃນຄຸກ ຈົນເຖິງແກ່ກຳ ໃນປີ 1796 ສ່ວນ " ພະບໍລິມ ມະລາຊາພິມມາ ໄດ້ໄປຮົບພະມ້າ ທາງຊຽງໃໝ່ (ໃນປີ1797) ຮອດເມືອງ ເຖີນ ເບື່ອຜັກຫວານ ເຖິງແກ່ມໍລະກຳ" ແຕ່ໃນຕົວຈິງຕ້ອງແມ່ນພວກ ເຂົາເອົາຢາເບື່ອໃຫ້ເພິ່ນກິນ.

ການຕໍ່ສູ້ເພື່ອເອກະລາດ ຂອງຊາວລາວ ພາຍໃຕ້ການນຳພາຂອງ ເຈົ້າ ນັນທະເສນ ແລະ ພະບໍລິມ ມະລາຊາພິມມາ ເຖິງຈະປະສົບຄວາມປະລາໄຊໄປກໍຕາມ, ແຕ່ມັນສະແດງໃຫ້ເຫັນ ໄດ້ເຖິງມູນເຊື້ອຮັກຊາດ, ຮັກເອກະລາດ ແລະ ບໍ່ຍອມຈຳນົນ ຂອງປະຊາຊົນລາວບັນດາເຜົ່າ. ໃຕ້ການນຳພາຂອງເຈົ້າ ນັນທະເສນ ທີ່ວຽງຈັນ ແລະ ພະບໍລິມ ມະລາຊາ ທີ່ນະຄອນພະນົມ, ການຕໍ່ສູ້ຄັ້ງນີ້ ໄດ້ເຮັດໃຫ້ປະຊາຊົນລາວ ທັງສອງຝັ່ງຂອງ ມີຄວາມຕື່ນຕົວສູງຂຶ້ນ ແລະ ຈະສືບ ຕໍ່ເສີມຂະຫຍາຍຈິດໃຈຮັກຊາດ ແລະ ຄຽດແຄ້ນຕໍ່ສັດຕູ ຄືພວກສັກດິນາສະຫຍາມຜູ້ຮຸກຮານ ແລະ ຢຶດຄອງລາວ ຊຶ່ງພະລັງແຫ່ງການຄຽດແຄ້ນອັນນີ້ຈະສືບຕໍ່ເສີມຂະຫຍາຍເປັນບັ້ນເລື້ອຍໆ ໄປຈົນກວ່າຈະໄດ້ຮັບໄຊຊະນະ.

3. ຂະບວນການຕໍ່ສູ້ ຂອງຊາວອານາຈັກລ້ານຊ້າງວຽງຈັນ ຕ້ານກັບສັກດິນາສະຫຍາມ ພາຍໃຕ້ການນຳພາຂອງເຈົ້າອະນຸວົງ ປີ 1804 -1829.

ເຈົ້າ ອະນຸວົງ ຫລື ເຈົ້າ ອະນຸວົງ ເກີດເມື່ອປີກຸນ, ກົງກັບປີ 1769 ທີ່ພະລາຊະວັງ ວຽງຈັນ ເປັນລູກຫຼ້າຂອງເຈົ້າ ສິລິບຸນຍະສານ, ໄດ້ຖືກຈັບໄປ ກຸງທົນບູລີ ໃນປີ1779 ພ້ອມກັບເຈົ້າເອື້ອຍ ອ້າຍ ແລະ ຜູ້ອື່ນໆ ໃນຕອນນັ້ນ ເຈົ້າ ອະນຸວົງ ມີອາຍຸພຽງ 11 ປີ. ໃນປີ 1794 ພວກສັກດິນາສະຫຍາມ ໄດ້ແຕ່ງຕັ້ງ ເຈົ້າ ອິນທະວົງ ຂຶ້ນມາເປັນເຈົ້າຊີວິດລາວ ລ້ານຊ້າງວຽງຈັນ ແລະ ໄດ້ແຕ່ງຕັ້ງ ເຈົ້າ ອະນຸວົງ ເປັນມະຫາອຸປະຣາດ. ຕະຫຼອດເວລາ 10 ປີ ທີ່ ເຈົ້າ ອະນຸວົງ ເປັນມະຫາອຸປະຣາດ ນັ້ນເພິ່ນໄດ້ຕັດສິນໃຈຕໍ່ສູ້ທ້ອນໂຮມລາວ ເພື່ອປະກາດເອກະລາດ ຕາມເສັ້ນທາງທີ່ ເຈົ້າ ນັນທະເສນ ເຄີຍເຮັດມາ ແລະ ຕາມການແນະນຳຂອງ ເຈົ້າ ອິນທະວົງ, ທັງດຳເນີນນະໂຍບາຍ ເອົາໃຈໃສ່ຕໍ່ສະຫຍາມ ຢ່າງສຸດຄວາມສາມາດ ເພິ່ນໄດ້ຍົກກອງທັບໄປຊ່ວຍສະຫຍາມ ຕ້ານພະມ້າຫຼາຍເທື່ອ, ເພິ່ນເປັນຜູ້ກ້າຫານ ແລະ ສາມາດຕີເອົາຊະນະພະມ້າໄດ້. ດັ່ງນັ້ນ, ເມື່ອເຈົ້າ ອິນທະວົງ ສິ້ນສຸດຊີວິດ ໃນປີ 1804 ແລ້ວເຈົ້າຊີວິດສະຫຍາມ ຈຶ່ງຕ້ອງຈຳເປັນຕັ້ງ ເຈົ້າອະນຸວົງ ຂຶ້ນຄອງອານາຈັກລ້ານຊ້າງວຽງຈັນຕໍ່ໄປ, ໃນໂອກາດຖືກແຕ່ງຕັ້ງຂຶ້ນເປັນເຈົ້າຊີວິດລ້ານຊ້າງວຽງຈັນ ເວລານັ້ນ ເຈົ້າ ອະນຸວົງ ມີອາຍຸໄດ້ 47 ປີ.



ເຈົ້າ ອະນຸວົງ ຂຶ້ນເປັນເຈົ້າກະສັດ ອານາຈັກ ລ້ານຊ້າງວຽງຈັນ ປີ 1804

- ການບູລະນະສ້າງສາປະເທດຊາດ ແລະ ກຽມເງື່ອນໄຂເພື່ອຕໍ່ສູ້ກູ້ເອກະລາດ.

ພາຍຫຼັງຂຶ້ນເປັນ ເຈົ້າຊີວິດລ້ານຊ້າງວຽງຈັນແລ້ວ ເຈົ້າ ອະນຸວົງກໍໄດ້ຍົກກອງທັບໄປໂຈມຕີພະມ້າທີ່ ຊຽງແສນ ຕາມທີ່ໄດ້ນັດໝາຍໄວ້ ພ້ອມກັບກອງທັບ ເຈົ້າ ກົມຫຼວງ ເທບທະລິລັກ, ກອງທັບນະຄອນລຳປາງ, ກອງທັບເມືອງ ນານ ແລະ ກອງທັບ ຊຽງໃໝ່ ທັງ 5 ກອງທັບ ໄດ້ພາກັນຍົກໄປຕັ້ງຄ້າຍລ້ອມ ເມືອງ ຊຽງແສນ ໄວ້ໃນລະດູແລ້ງ ປີ 1804, ຝ່າຍພະມ້າທີ່ຢູ່ເມືອງ ຊຽງແສນ ບໍ່ໄດ້ຍົກທັບອອກມາຮົບ ມີແຕ່ຮັກສາເມືອງໄວ້ຢ່າງແຂງແຮງ. ກອງທັບທັງ 5 ຫົວເມືອງ ບໍ່ສາມາດເຂົ້າຕີ ເມືອງ ຊຽງແສນ ໄດ້ຈົນເຖິງເດືອນ 6, ປີຕໍ່ໄປຝົນຕົກລົງມາຫຼາຍໄພ່ພົນໃນກອງທັບເກີດໄຂ້ເຈັບລົ້ມຕາຍຢ່າງຫຼວງຫຼາຍ, ທັງສະບຽງກໍໜ້ອຍລົງ ແລະ ທັງຮູ້ຂ່າວວ່າກອງທັບ ພະມ້າ ເມືອງ ອັງວະ ຈະລົງມາຕີເປັນກອງໜູນອີກ. ດັ່ງນັ້ນ ແມ່ທັບເມືອງອື່ນໆ ຈຶ່ງພາກັນເລີກຄືນເມືອໝົດ, ສ່ວນເຈົ້າ ອະນຸວົງ ແຫ່ງວຽງຈັນ ບໍ່ຍອມຖອຍຄືນຄືໝູ່ ແຕ່ໄດ້ພະຍາຍາມປິດລ້ອມເມືອງໄວ້ຢ່າງແໜ້ນໜາ ເພື່ອຈະຕີເອົາເມືອງ ຊຽງແສນ ໃຫ້ໄດ້. ຊາວເມືອງທີ່ຖືກປິດລ້ອມໄດ້

ຮັບຄວາມອຶດຢາກຫລາຍ ກໍພາກັນອອກມາອ່ອນຍອມຕໍ່ກອງທັບ ເຈົ້າ ອະນຸວົງ ຢ່າງຫຼວງຫຼາຍ. ໂປ່ມະຍູງອນ ແມ່ທັບ ພະມ້າ ຈະກີດຂວາງໄວ້ກໍບໍ່ໄດ້. ເມື່ອຊາວເມືອງແຕກໜີຫຼາຍ, ທະຫານ ຂອງ ໂປ່ມະຍູງອນ ກໍແຕກໜີນຳ, ເຮັດໃຫ້ເກີດຄວາມສັບສົນໃນກອງທັບພະມ້າ. ເຈົ້າ ອະນຸວົງ ເຫັນວ່າໄດ້ໂອກາດກໍຍົກກອງທັບຕົນ ເຂົ້າຕີໜ່ຳກອງທັບພະມ້າແຕກ. ໂປ່ມະຍູງອນ ແມ່ທັບ ພະມ້າ ຖືກປືນຕາຍຄາສະໜາມຮົບ. ພະຍາເມືອງຂວາ ທີ່ແມ່ທັບພະມ້າ ຕັ້ງໃຫ້ເປັນເຈົ້າເມືອງ ຊຽງ ແສນ ນັ້ນ ກໍພາຄອບຄົວຫຼົບໜີຕາມແມ່ນ້ຳຂອງໄປແດນພະມ້າ. ເຈົ້າ ອະນຸວົງ ຈຶ່ງໃຫ້ກວາດເອົາ ຄອບຄົວຊາວເມືອງ ໄດ້ 24.000 ກວ່າຄົວ ແລ້ວສັ່ງທຳລາຍກຳແພງເມືອງ ແລະ ເອົາໄຟເຜົາ ເມືອງເສຍ ແລ້ວແບ່ງປັນຄອບຄົວເປັນ 5, ສ່ວນໜຶ່ງໃຫ້ນະຄອນຊຽງໃໝ່, ສ່ວນໜຶ່ງໃຫ້ ເຈົ້ານະ ຄອນລຳປາງ, ສ່ວນໜຶ່ງໃຫ້ ເຈົ້າເມືອງ ນານ, ສ່ວນໜຶ່ງສົ່ງໄປ ບາງກອກ ແລະ ສ່ວນໜຶ່ງເອົາມາ ໄວ້ວຽງຈັນ.

ເຈົ້າຊີວິດສະຫຍາມ ເຫັນຄວາມພິລະອາດຫານຂອງກອງທັບລາວວຽງຈັນ ຜ່ານຄຳເວົ້າ ທີ່ວ່າ: “ ແມ່ທັບກຸງອີ່ນໆ ນັ້ນກັບລົງມາເປົ່າ, ບໍ່ໄດ້ລາຊະການສິ່ງໃດກໍຂັດເຄືອງພະໄທເປັນອັນ ມາກ ຈຶ່ງດຳລັດວ່າບໍ່ຮູ້ເທົ່າລາວ ໃຫ້ລົງພະລາຊະອາດຍາຈຳຄຸກ ກົມຫລວງເທບທະລີລັກ ແລະ ພະຍາ ສົມມະລາດ ” ຄວາມພິລະອາດຫານຂອງ ເຈົ້າ ອະນຸວົງ ເຈົ້າຊີວິດລ້ານຊ້າງວຽງຈັນ ຄົນ ໃໝ່ທີ່ສາມາດນຳພາກອງທັບລາວ ຕີພະມ້າແຕກໃນຄັ້ງນັ້ນ ໄດ້ເຮັດໃຫ້ຊື່ສຽງຂອງເພິ່ນລືຊາປາ ກົດວ່າເປັນນັກຮົບຜູ້ມີສີມືຍອດຢ້ຽມ ໃນບັນດາແມ່ທັບຫົວເມືອງປະເທດສະລາດທັ້ງຫຼາຍ ຂອງ ສະຫຍາມ ຈົນແມ່ທັບຝ່າຍສະຫຍາມເອງ ກໍໄດ້ສັນລະເສີນສີມືຂອງເພິ່ນເປັນພິເສດ, ປະຊາຊົນ ລາວ ທຸກຖ້ວນໜ້າ ຍິ່ງເພີ່ມຄວາມເຊື່ອໝັ້ນໃນໃຈວ່າ ເຈົ້າ ອະນຸວົງ ຈະສາມາດນຳພາປະຊາຊົນ ຕໍ່ສູ້ທ້ອນໂຮມລາວ ແລະ ປະກາດເອກະລາດ ຈາກສະຫຍາມໄດ້ສຳເລັດ.

ເຈົ້າ ອະນຸວົງ ຍົກທັບຈາກ ຊຽງແສນ ມາຮອດວຽງຈັນໄດ້ບໍ່ພໍເດືອນ ກໍໄດ້ຮັບຄຳສັ່ງໃນ ເດືອນ 9 (ເດືອນລາວ) ປີ 1804 ໃຫ້ກະກຽມກອງທັບວຽງຈັນ... ຂຶ້ນໄປຕີ ເມືອງ ຊຽງຕຸງ, ເມືອງ ລາວ ຝາກຕາເວັນອອກ ແດນພະມ້າ ແລະ ໃຫ້ໄປເຖິງພ້ອມກັນໃນລະດູແລ້ງ ”. ດັ່ງນັ້ນ ເຈົ້າ ອະ ນຸວົງ ຈຶ່ງໄດ້ກະກຽມກອງທັບຫຼວງວຽງຈັນ ຂຶ້ນໄປຕີ ພະມ້າ ທີ່ຢຶດຄອງຫົວເມືອງລາວ ພາກເໜືອ ເຊັ່ນ: ເມືອງ ຊຽງຕຸງ, ເມືອງ ຊຽງຮຸ່ງ, ເມືອງ ສິງ ແລະ ກໍໄດ້ເຄື່ອນທັບຂຶ້ນໄປ ຕົ້ນປີ 1805 ພ້ອມ ກັບກອງທັບ ເມືອງ ລຳປາງ, ເມືອງ ຊຽງໃໝ່, ເມືອງ ແພ, ເມືອງ ເຖີນ, ເມືອງ ຫລວງພະບາງ ແລະ ເມືອງອື່ນໆ. ສ່ວນກອງທັບຫລວງສະຫຍາມ ແມ່ນບໍ່ໄດ້ຍົກຂຶ້ນໄປເລີຍ ຍ້ອນພວກເຂົາມີ ແຜນການຢາກໃຫ້ກອງທັບລາວໄປຕາຍແທນພວກເຂົາ. ກອງທັບ ເຈົ້າ ອະນຸວົງ ແລະ ບັນດາ ກອງທັບອື່ນໆ ໄດ້ເຂົ້າມາອ້ອມຢູ່ ເມືອງ ຍອງ, ເມືອງ ຊຽງຕຸງ, ເມືອງ ແຮມ, ເມືອງ ຫຼວງ, ເມືອງ

ພູຄາ, ເມືອງ ພິງ, ເມືອງ ນູນ, ເມືອງ ຮຳ, ເມືອງ ຂອນ, ເມືອງລາ, ເມືອງ ຊຽງຮຸ່ງ, ເມືອງ ຊຽງ ແຂງ... ແລະ ໄດ້ຕີ ແລະ ຍຶດເອົາເມືອງບັງໃຫຍ່ເຫຼົ່ານີ້ ໃນເດືອນ 6 (ເດືອນລາວ) ປີ 1805 ໄດ້ ຕີເມືອງນ້ອຍໃຫຍ່ ລວມທັງໝົດ 50 ກວ່າເມືອງ.

ການປັບປຸງ ແລະ ສ້າງປະເທດຊາດ ຢ່າງຮອບດ້ານ ເພື່ອກະກຽມໃຫ້ແກ່ການທ້ອນໂຮມ ລາວ ແລະ ການປະກາດເອກະລາດແຫ່ງຊາດນັ້ນ ເປັນວຽກຕົ້ນຕໍ ທີ່ສຳຄັນທີ່ສຸດຂອງ ເຈົ້າ ອະນຸ ວົງ ຫລັງຈາກເພິ່ນໄດ້ຍົກທັບໄປຕີພະມ້າ ອອກຈາກສິບສອງພັນນາລີ້ແລ້ວ ປະກົດວ່າການເກນ ເອົາກອງທັບລາວລ້ານຊ້າງ ໄປຊ່ວຍສັກດິນາສະຫຍາມໄດ້ເບົາບາງລົງ ອັນໄດ້ເຮັດໃຫ້ເພິ່ນມີເວ ລາສຸມໃສ່ການນຳພາປະຊາຊົນລາວ ເພື່ອປັບປຸງວຽກງານທີ່ສຳຄັນຂອງຊາດ ໃຫ້ເຂັ້ມແຂງຂຶ້ນ ໃນຫລາຍດ້ານໄປພ້ອມໆກັນ ເຊັ່ນ: ການບູລະນະສ້າງສາ, ການທະຫານ, ການປົກຄອງ, ການ ເມືອງ, ສັງຄົມວັດທະນະທຳ, ເພື່ອສ້າງເງື່ອນໄຂ ໃຫ້ແກ່ການປະກາດເອກະລາດແຫ່ງຊາດ ໃນ ຂັ້ນຕໍ່ໄປ.

ການບູລະນະສ້າງສາ: ເຈົ້າ ອະນຸວົງ ຖືວ່າວຽກງານບູລະນະ ສ້າງສາປະເທດຊາດ ແມ່ນ ວຽກງານທີ່ສຳຄັນ ແລະ ຈຳເປັນ ທີ່ຈະຕ້ອງລົງມືປະຕິບັດ ໃຫ້ສຳເລັດໂດຍພື້ນຖານ ໂດຍສະ ເພາະ ແມ່ນການກໍ່ສ້າງ ພະລາຊະວັງ ແລະ ວັດວາອາຮາມ ເພື່ອເປັນບ່ອນເຮັດວຽກງານ, ເປັນ ບ່ອນພັກເຊົາ, ບ່ອນປະຊຸມປຶກສາຫາລືຂອງຂ້າລາຊະການຕ່າງໆ ແລະ ເປັນບ່ອນເຕົ້າໂຮມເຮັດ ພິທີທາງດ້ານສາສະໜາ. ສະນັ້ນ, ໃນປີ 1806 ເພິ່ນຈຶ່ງໄດ້ເລີ່ມນຳພາປະຊາຊົນ ກໍ່ສ້າງພະລາ ຊະວັງ ແລະ ຫໍໂຮງຂຶ້ນໃນ ນະຄອນຫລວງວຽງຈັນ ຢ່າງຫຼວງຫຼາຍ ເພື່ອໃຫ້ພຽງພໍກັບຄວາມຕ້ອງ ການທັງກໍ່ສ້າງກຳແພງເມືອງໃຫ້ເຂັ້ມແຂງ. ເຈົ້າ ອະນຸວົງ ຖືເອົາວຽກງານອຸປະຖຳບຳລຸງປະຕິສັງ ຂອນ ພຸດທະສາສະໜາ ແລະ ກໍ່ສ້າງວັດວາອາຮາມ ຫລື ສາທາລະນະສະຖານ ເປັນວຽກງານ ທີ່ສຳຄັນ ຍ້ອນວ່າ ພຸດທະສາສະໜາ ເປັນເລື່ອງມະຫາຊົນໃນສະໄໝ ນັ້ນທັງເປັນຈຸດລວມ ຂອງ ປະຊາຊົນ ໃນຫລາຍດ້ານບໍ່ວ່າດ້ານສັງຄົມ - ວັດທະນະທຳ, ການປົກຄອງ ແລະ ເສດຖະກິດ.

ຫລັງຈາກການຈັດຕັ້ງແບ່ງໜ້າທີ່ວຽກງານຮັບຜິດຊອບສ້າງສາຢູ່ວຽງຈັນ ເປັນທີ່ຮຽບຮ້ອຍ ແລ້ວ ເຈົ້າ ອະນຸວົງ ໄດ້ໄປນະຄອນພະນົມ ແລ້ວຮຽກປະຊຸມບັນດາເຈົ້າເມືອງຕ່າງໆ ເຊັ່ນ: ພະບໍ ລິມ ມະລາຊາສຸດຕາ ເຈົ້າເມືອງນະຄອນພະນົມ, ພະຍາ ຈັນທະສຸລິຍະວົງສາ ເຈົ້າເມືອງມຸກດາ ຫານ ເປັນຕົ້ນເພື່ອປຶກສາຫາລືກັນເລື່ອງສ້າງຂົວ ແລະ ບູລະນະສ້ອມແຊມສິມໃນວັດພະທາດ ພະນົມ. ຍ້ອນວ່າ ທາດພະນົມ ແມ່ນບູຮານສະຖານທີ່ສຳຄັນຂອງ ປະຊາຊົນລາວ ທັງສອງຝັ່ງ ຂອງ, ໃນແຕ່ລະປີປະຊາຊົນ ໄດ້ພາກັນຫຼັ່ງໄຫຼມາເຮັດບຸນໄຫວ້ ພະທາດພະນົມ ຢ່າງຫຼວງຫຼາຍ ໂດຍອາໄສແມ່ນ້ຳຂອງ ເປັນເສັ້ນທາງທຽວໄປມາ ແຕ່ວ່າເສັ້ນທາງແຕ່ວັດເຖິງທ່ານ້ຳ ຍັງບໍ່ສະ

ດວກ ແລະ ສິມໃນວັດກໍເພັ້ງຫລາຍ, ກະໂຕພະທາດເອງກໍຊຸດລົງຢູ່ເທິງພະທາດກໍຫັກ, ເຈົ້າອະນຸວົງ ຈຶ່ງນຳພາປະຊາຊົນ ສ້າງສາປົວແປງຄືນໃໝ່ ເພື່ອເຮັດໃຫ້ ວັດພະທາດພະນົມ ມີໃບໜ້າໃໝ່ທີ່ສວຍງາມ. ນອກຈາກຈະເຕົ້າໂຮມໄດ້ຄວາມສາມັກຄີແລ້ວ, ມັນຍັງສະດວກໃນການປຸກລະດົມນ້ຳໃຈຮັກຊາດ ຕ້ານສັດຕູຜູ້ຮຸກຮານ ແລະ ຢຶດຄອງລາວໄດ້ນຳອີກ, ເຈົ້າ ອະນຸວົງ ຈຶ່ງຖືວ່າວຽກງານບູລະນະສ້ອມແຊມ ວັດພະທາດພະນົມ ເປັນວຽກງານທີ່ສຳຄັນ ແລະ ຮີບດ່ວນ. ໃນການຊ້ອມແຊມ ພະທາດພະນົມ ນັ້ນ ພະຍາ ຈັນທະສຸລິຍະວົງສາ ເຈົ້າເມືອງ ມຸກດາຫານ ເປັນຜູ້ຮັບຜິດຊອບນຳພາປະຊາຊົນ ບູລະນະສ້ອມແຊມສິມໃນວັດ, ສ່ວນພະບໍລິມມະລາຊາສຸດ ຕາ ນັ້ນແມ່ນຮັບຜິດຊອບນຳພາ ປະຊາຊົນ ສ້າງຂົວ ເຊັ່ນ:

ໃນປີ 1807, ຫລັງຈາກ ການສ້າງຂົວ ແຕ່ວັດເຖິງທ່ານ້ຳ ໄດ້ສຳເລັດລົງ ເຈົ້າ ອະນຸວົງ ພ້ອມເຈົ້າເມືອງ ນະຄອນພະນົມ, ເຈົ້າເມືອງ ມຸກດາຫານ ແລະ ຫົວເມືອງອື່ນໆ ຈຶ່ງໄດ້ເຕົ້າໂຮມ ປະຊາຊົນ ທັງສອງຝັ່ງຂອງ ມາຮ່ວມກັນເຮັດບຸນໃຫຍ່ສະຫລອງຂົວ ວັດທາດພະນົມ ນັ້ນ, ການເຮັດບຸນເທື່ອນີ້ ນອກຈາກການຍ້ອງຍໍຊົມເຊີຍ ຄວາມສາມັກຄີຂອງ ປະຊາຊົນ ທີ່ຕື່ນຕົວພ້ອມພຽງກັນມາສ້າງຂົວ. ປີ 1808 ເຈົ້າ ອະນຸວົງ ໄດ້ເລີ່ມນຳພາປະຊາຊົນປົວແປງ ເມືອງ ໜອງຄາຍ ໃຫ້ສວຍງາມ ໂດຍສະເພາະກໍແມ່ນ ການກໍ່ສ້າງວັດຕ່າງໆ ເຊັ່ນ: ວັດສີບຸນເຮືອງ ແລະ ວັດອື່ນໆ ໃນຕົວເມືອງ ໜອງຄາຍ.

ໃນປີ 1810 ເຈົ້າ ອະນຸວົງ ໄດ້ຍ້າຍຈາກ ໜອງຄາຍ ມາປົວແປງ ບ້ານ ສີຊຽງໃໝ່, ໂດຍສະເພາະແມ່ນເພີ່ນໄດ້ນຳພາປະຊາຊົນສ້າງ ຫໍພະແກ້ວ ຂຶ້ນທີ່ ວັດຊ້າງເຜືອກ ພ້ອມກັບໄດ້ສ້ອມແຊມພະພຸດທະຮູບໃຫຍ່ໃນສິມ ແລະ ໄດ້ຊີ້ນຳການສ້າງສາສິ່ງຕ່າງໆ ອີກຫຼາຍຢ່າງ ຄື: ໃຫ້ຂຽນຮູບພະພຸດທະຮູບຕາມຝາເຮືອນ 1.000 ອົງ, ສ້າງພະພຸດທະຮູບໃສ່ຈົ່ງກົມ 4 ດ້ານ 114 ອົງ, ສ້າງ ພະພິມ ໃສ່ຊ່ອງຝາເຮືອນ 2602 ອົງ, ໄຖ່ຄົນໄວ້ອຸປະຖາກບົວລະບັດຮັກສາ ຫໍພະແກ້ວ ຊາຍ 5 ຄົນ, ພ້ອມດຽວກັນກັບການສ້າງສາ ຫໍພະແກ້ວ ຂຶ້ນທີ່ ວັດຊ້າງເຜືອກ ເພື່ອເປັນບ່ອນສາບານຕົວນັ້ນ, ເຈົ້າ ອະນຸວົງ ຍັງໄດ້ນຳພາປະຊາຊົນ ສ້າງຂົວຂ້າມນ້ຳຂອງ ບ່ອນຊື່ ວັດອຸບມຸງ ຝັ່ງຊາຍໃສ່ບ່ອນຊື່ວັດຊ້າງເຜືອກ " ໃນການສ້າງຂົວນີ້ມີພະສົງ ຈາກ 71 ວັດ, ສ່ວນຂົວແບບໃດນັ້ນ ບໍ່ສາມາດວາດພາບໄດ້ ມີແຕ່ສິລາຈາລຶກບອກໄວ້ວ່າ ພະອົງໄດ້ສ້າງຂົວຂ້າມນ້ຳຂອງ ກໍເພື່ອໃຫ້ຄົນທັງຫລາຍທຽວໄປມາສະດວກ ".

ໃນປີ 1812 ສ້າງຫໍພະແກ້ວ ແລະ ສ້າງຂົວ ທີ່ບ້ານ ສີຊຽງໃໝ່ (ວັດຊ້າງເຜືອກ ສຳເລັດແລ້ວ ຈຶ່ງໄດ້ເຮັດພິທີສະເຫລີມສະຫລອງ ຕະຫລອດ 7 ວັນ 7 ຄືນ ການສະເຫລີມສະຫລອງ ຫໍພະແກ້ວ ແລະ ຂົວ ຄັ້ງນີ້ແມ່ນມີຄວາມໝາຍສຳຄັນເປັນພິເສດ ຍ້ອນ ພະແກ້ວ ແມ່ນຊັບສົມບັດ

ອັນລ້ຳຄ່າຂອງຊາດລາວ ທີ່ຖືກພວກສັກດິນາສະຫຍາມ ມາລັກປຸ້ນເອົາໄປ. ສະນັ້ນ ການສ້າງ ແລະ ການສະເຫລີມສະຫລອງ ຫໍພະແກ້ວ ຈຶ່ງແມ່ນການປຸກລະດົມນ້ຳໃຈຮຽດແຄ້ນຕໍ່ພວກສັດຕູ ແລະ ການສ້າງຂົວ ກໍແມ່ນກະກຽມຂໍ້ສະດວກເພື່ອຍົກ ທັບໄປຕີສັດຕູ.

ໃນປີ 1812 ເຈົ້າ ອະນຸວົງ ໄດ້ໄປນະຄອນພະນົມ ເພື່ອໄປໄຫວ້ທາດພະນົມ ແລະ ນຳພາ ປະຊາຊົນ ສະເຫລີມສະຫລອງ ຫໍພະແກ້ວ ໃນວັດພະທາດພະນົມ. ໃນປີ 1813 ກໍມາເຮັດບຸນ ຢູ່ວັດພະທາດພະນົມ ອີກຄື "... ເດືອນ ຈຽງ ແຮມ 4 ຄ່ຳ ເຈົ້າມະຫາຊີວິດ ວຽງຈັນ ສະເດັດລົງ ມາທຳບຸນສະຫລອງທີ່ ວັດພະມະຫາທາດພະນົມແລ ".

ໃນປີ 1816 ການບູລະນະສ້ອມແຊມ ຫໍພະແກ້ວ ທີ່ນະຄອນຫວງວຽງຈັນ ໄດ້ສຳເລັດລົງ ຈຶ່ງໄດ້ເຮັດບຸນສະເຫລີມສະຫລອງ ຫໍພະແກ້ວ ຢູ່ນະຄອນຫວວງວຽງຈັນ ອີກ ໃນຄາວນີ້ ເຈົ້າ ອະນຸວົງ ໄດ້ທານ ຜ້າຈີ່ວອນ ເຖິງ 7.000 ຜືນ.



ຫໍພະແກ້ວ ວຽງຈັນ ທີ່ຖືກທຳລາຍໂດຍສະຫຍາມ, ຮູບຖ່າຍ ໃນຊຸມປີ 1910 ກ່ອນການບູລະນະ ໃນປີ 1936

ໃນປີ 1819 ເຈົ້າ ອະນຸວົງ ໄດ້ນຳພາປະຊາຊົນ ສ້າງວັດສະຕະສະຫັດສາລາມ ຄືວັດສີ ສະເກດ ທຸກມື້ນີ້ທີ່ນະຄອນຫຼວງວຽງຈັນ. ໃນໂອກາດນີ້ເພິ່ນໄດ້ສັ່ງໃຫ້ສ້າງພະໃຫຍ່ໃນສີມ 1 ອົງ. ພະພຸດທະຮູບທອງໃຫຍ່ ລຽບອ້ອມຈົ່ງກົມ ທັງ 4 ດ້ານ 102 ອົງ, ພະເງິນບຸ 276 ອົງ, ພະພິມ ໃສ່ຊ່ອງຝາສີມ 2052 ອົງ, ພະພິມ ໃສ່ຕາມຊ່ອງຝາຈົ່ງກົມທັງ 4 ດ້ານ 6840 ອົງ, ວິຫານໜຶ່ງ ຫລັງ, ພະເຈດີ 2 ອົງ, ຫໍໄຕ 1 ຫໍ, ສາລາໂຮງທຳ 1 ຫລັງ, ກຸຕິໝູ່ 2 ໝູ່, ກຸຕິລຽບເປັນຫລັງ 8 ຫລັງ, ຫໍກອງ 1 ຫໍ, ກຳແພງອ້ອມວັດ 4 ດ້ານ ແລະ ໄຕ່ຄົນໄວ້ອຸປະຖາກວັດ 18 ຄົນ ຍ້ອນມີສິ່ງ ກໍ່ສ້າງຫລາຍຢ່າງ ຄືດັ່ງນັ້ນ ຈຶ່ງໃຊ້ເວລາກໍ່ສ້າງວັດນີ້ຫລາຍປີ, ພິເສດແມ່ນ ເຈົ້າ ອະນຸວົງ ໄດ້ໃຊ້ ວັດນີ້ ເປັນສະຖານທີ່ຮັບໃຊ້ ຈຸດປະສົງອັນເລິກລັບທາງດ້ານການເມືອງ ຄືໃນແຕ່ລະປີ ເພິ່ນໄດ້ ໃຊ້ວັດນີ້ ເປັນບ່ອນຮັບຄຳສາບານ ແລະ ຄວາມຈົ່ງຮັກພັກດີຂອງເຈົ້າເມືອງຕ່າງໆ ແລະ ນຳໃຊ້ ເປັນບ່ອນເພື່ອກຽມພ້ອມລຸກຮື້ຂຶ້ນຕໍ່ສູ້ຍາດເອົາເອກະລາດ.



ຫໍໄຕ ບ່ອນມ້ຽນໜັງສືໃບລານ ໃນວັດສີສະເກດ ທີ່ສ້າງຂຶ້ນໃນປີ 1819 ໂດຍເຈົ້າ ອະນຸວົງ
(ໜັງສືໃບລານຖືກສະຫຍາມຈູດເສຍຫາຍໃນເວລາເຂົ້າປຸ້ນສະດົມ ເມືອງ ວຽງຈັນ ເທື່ອສຸດທ້າຍ 1828)

ການບູລະນະສ້າງສາທັງໝົດໃນສະໄໝເຈົ້າ ອະນຸວົງ ນັ້ນແມ່ນຫລາກຫລາຍ ແລະ ໃຫຍ່ ໂຕ. ຈຸດປະສົງຂອງເພິ່ນກໍແມ່ນສ້າງສາບ້ານເມືອງ ໃຫ້ຈະເລີນຮຸ່ງເຮືອງສວຍງາມ ແລະ ສ້າງ ຄວາມສາມັກຄີພ້ອມພຽງ, ອອກແຮງງານ ແລະ ດຸໝັ່ນໃນໝູ່ປະຊາຊົນລາວ ນຳອີກ.



ພະພຸດທະຮູບໃນ ວັດສີສະເກດ ທີ່ສ້າງຂຶ້ນ ໃນປີ 1819 ໂດຍເຈົ້າ ອະນຸວົງ

ການທະຫານ: ຄຽງຄູ່ກັບວຽກງານສ້າງສາບູລະນະປະເທດຊາດນັ້ນ ເຈົ້າອະນຸວົງ ໄດ້ເອົາ ໃຈໃສ່ປັບປຸງກອງທັບ ໃຫ້ເຂັ້ມແຂງຢູ່ເປັນປະຈຳ ເພື່ອກຽມພ້ອມຕໍ່ສູ້ຍາດເອົາເອກະລາດຄືນມາ. ເພິ່ນຖືວ່າການທະຫານ ນີ້ເປັນວຽກລະດັບໜ້າ ແລະ ສຳຄັນກວ່າວຽກງານດ້ານອື່ນໆ ຍ້ອນວ່າ ເພິ່ນມີບົດຮຽນ ແລະ ຜົນງານທາງດ້ານນີ້ຫລາຍມາແລ້ວ. ໃນສະໄໝເພິ່ນຢູ່ຕຳແໜ່ງ ມະຫາອຸ ປະຣາດ ເຈົ້າ ອິນທະວົງ ໄດ້ມອບສິດອຳນາດທັງໝົດ ໃຫ້ເພິ່ນເປັນຜູ້ປັບປຸງນຳພາກອງທັບລາວ ລ້ານຊ້າງວຽງຈັນ. ເຈົ້າ ອະນຸວົງ ໄດ້ຖືກສະຫຍາມ ສັ່ງໃຫ້ໄປລົບພະມ້າຫລາຍຄັ້ງ ແຕ່ລະຄັ້ງໄດ້ ຮັບໄຊຊະນະ ຈົນເປັນທີ່ເລົ່າລືກັນວ່າ ກອງທັບລາວລ້ານຊ້າງວຽງຈັນ ເປັນກອງທັບທີ່ເຂັ້ມແຂງ ທີ່ສຸດ ໃນບັນດາກອງທັບປະເທດສະລາດ ຂອງສະຫຍາມ.

ພໍຮອດສະໄໝ ເຈົ້າ ອະນຸວົງ ຂຶ້ນເປັນເຈົ້າຊີວິດ ເຖິງຈະມີວຽກງານສ້າງສາຢ່າງຫຼວງຫຼາຍ ແຕ່ເພິ່ນກໍຍັງໄດ້ເອົາໃຈໃສ່ ປັບປຸງກອງທັບ ໃຫ້ເຂັ້ມແຂງຕື່ມອີກ ໂດຍໄດ້ເອົາໃຈໃສ່ຈັດຕັ້ງລະ ບຽບ ແລະ ກົນໄກ ເພື່ອປ້ອງກັນລາຊະບັນລັງ ແລະ ປະເທດຊາດ ທັງກຽມພ້ອມຍົກທັບໄປຊ່ວຍ ໃນເວລາສັກດິນາສະຫຍາມຕ້ອງການ, ອີງໃສ່ເງື່ອນໄຂ ແລະ ຈິດໃຈອັນນີ້ ເຈົ້າ ອະນຸວົງ ຈຶ່ງປັບ

ປຸງກອງທັບ ໃຫ້ເຂັ້ມແຂງກວ່າເກົ່າ ໂດຍເອົາທ້ອງສະໜາມຫຼວງ ເປັນບ່ອນຝຶກແອບທະຫານ ແລະ ເອົາເພຍກວ້ານ ເປັນແມ່ທັບໃຫຍ່ ແລະ ເປັນຜູ້ຮັບຜິດຊອບວຽກງານການທະຫານ. ແຕ່ຕໍ່ມາໄລຍະສົງຄາມກູ້ເອກະລາດນັ້ນ, ເພິ່ນໄດ້ຈັດຕັ້ງກອງທັບໃຫຍ່ຂຶ້ນເປັນຫລາຍກອງເຊັ່ນ: ກອງທັບ ເຈົ້າ ສຸດທິສານ, ກອງທັບ ເຈົ້າ ອຸປະລາດຕິດສະ, ກອງທັບຂອງ ເຈົ້າ ລາຊະບຸດ, ກອງທັບ ຂອງ ເຈົ້າ ລາຊະວົງ. ແຕ່ພິເສດທີ່ສຸດໃນສະໄໝ ເຈົ້າ ອະນຸວົງ ເພິ່ນໄດ້ແຕ່ງຕັ້ງ "... ເຈົ້າໂປ້ບຸດຄົນໃຫຍ່ເປັນ ເຈົ້າ ສຸດທິສານ... " ຊຶ່ງເປັນຕຳແໜ່ງພິເສດໃນສະໄໝນັ້ນ ຊຶ່ງອາດຈະແມ່ນຕຳແໜ່ງທີ່ມີອຳນາດສູງສຸດ ບໍ່ວ່າທາງດ້ານການທະຫານ ແລະ ການປົກຄອງ. ໂດຍສະເພາະດ້ານການທະຫານນັ້ນ ເຈົ້າ ສຸດທິສານ ກໍເປັນຜູ້ບັນຊາການໃນກອງທັບຫຼວງຮ່ວມກັບ ເຈົ້າ ອະນຸວົງ ເອງ, ຕໍ່ມາ ເຈົ້າ ອະນຸວົງ ກໍມີຄຳສັ່ງໃຫ້ບັນດາຫົວເມືອງ ທີ່ຂຶ້ນກັບ ວຽງຈັນ ທັງໝົດເກັບເກນຄົນເຂົ້າກອງທັບ, ກຽມຊ້າງ, ມ້າ, ອາວຸດຍຸດໂທປະກອນ ແລະ ສະບຽງອາຫານໄວ້ໃຫ້ພຽງພໍ.

ການປັບປຸງກອງທັບ ໃຫ້ເຂັ້ມແຂງຄືດັ່ງກ່າວມານັ້ນແມ່ນເພື່ອແມ່ໃສ່ກຽມພ້ອມລຸກຮື້ຂຶ້ນຍາດເອົາເອກະລາດໃນຂັ້ນຕໍ່ໄປ.

ການປົກຄອງ: ວຽກງານການປົກຄອງ ອານາຈັກລ້ານຊ້າງວຽງຈັນ ໃນສະໄໝ ເຈົ້າ ອະນຸວົງ ແມ່ນວຽກງານ ທີ່ມີລັກສະນະເປັນປຶກແຜ່ນແໜ້ນໜາ ຊຶ່ງໄດ້ເລີ່ມມາແຕ່ສະໄໝ ເຈົ້າ ອິນທະວົງພຸ້ນ. ແຕ່ເຈົ້າ ອະນຸວົງ ກໍໄດ້ປັບປຸງອຳນາດການປົກຄອງທັງສ່ວນກາງ ແລະ ສ່ວນຫົວເມືອງ ໃຫ້ເຂັ້ມແຂງຂຶ້ນຕື່ມອີກ, ສຳລັບສ່ວນກາງນັ້ນ: ເພິ່ນໄດ້ແຕ່ງເຈົ້າ ຕິດສະ ເປັນເຈົ້າ ມະຫາອຸປະຣາດ. ແຕ່ງຕັ້ງເຈົ້າ ໂປ້ ເປັນເຈົ້າ ສຸດທິສານ, ເຈົ້າ ເຫງົ້າ ເປັນເຈົ້າ ລາຊະວົງ, ເຈົ້າ ໂຍ້ ເປັນເຈົ້າ ລາຊະບຸດ; ໃນຝ່າຍເສນາອາມາດເພິ່ນໄດ້ກຳນົດຕຳແໜ່ງຕ່າງໆ ຄື: ເພຍເມືອງຈັນ ວ່າລາຊະການໃຫຍ່ຝ່າຍເໜືອ, ເພຍເມືອງແສນ ວ່າລາຊະການຝ່າຍໃຕ້, ກວານວຽງ ວ່າລາຊະການຝ່າຍກົມເມືອງ, ກວານວົງ ວ່າລາຊະການໃນວັງ, ກວານໂພຊະນາ ວ່າລາຊະການຝ່າຍກົມນາ, ກວານຄັງ ວ່າລາຊະການທ້ອງພະຄັງທຸກສິ່ງ, ກົມພະສັດສະດີເປັນບັນຊີເມືອງ ແລະ ນອກນັ້ນກໍຍັງມີຕຳແໜ່ງອື່ນໆອີກ ຄົບຕາມທຳນຽມ ຂອງອານາຈັກລາວລ້ານຊ້າງວຽງຈັນ.

ໃນຫົວເມືອງຕ່າງໆ ນັ້ນ ເຈົ້າ ອະນຸວົງ ກໍໄດ້ສັ່ງໃຫ້ມີການປັບປຸງອຳນາດການປົກຄອງໃຫ້ເຂັ້ມແຂງຂຶ້ນຕື່ມ. ໃນບາງເມືອງທີ່ມັກມີບັນຫາຫລາຍ ເຊັ່ນ ຢູ່ເມືອງ ພວນ ອັນເປັນເມືອງຊາຍແດນດ້ານເໜືອນັ້ນ, ໃນປີ 1804, ເຈົ້າ ອະນຸວົງ ກໍໄດ້ແຕ່ງຕັ້ງໃຫ້ເຈົ້າ ນ້ອຍ ເປັນເຈົ້າເມືອງສືບຕໍ່ຈາກເຈົ້າ ຊຽງ. ພ້ອມດຽວກັນນີ້ ເຈົ້າ ອະນຸວົງ ກໍໄດ້ສົ່ງເສນາອາມາດຂຶ້ນໄປຈັດສຳມະໂນຄົວຢູ່ຊຽງຂວາງ ເພື່ອຈະຈັດຕັ້ງກອງທັບ ແລະ ໄດ້ສັ່ງໃຫ້ກຽມປ້ອງກັນຊາຍແດນດ້ານນີ້ເປັນຢ່າງດີ.

ໃນສະໄໝ ເຈົ້າ ອະນຸວົງ ບັນຫາຫົວເມືອງໃຫຍ່ນ້ອຍ ທີ່ຢູ່ຊາຍແດນລາວອານາມ ແລະ ລາວຂະເໝນ ມີ 79 ຫົວເມືອງ ແລະ ຫົວເມືອງລາວໃຫຍ່ນ້ອຍ ຢູ່ຕາມລຳແມ່ນ້ຳຂອງ ແລະ ຕາມຝ່າຍໃຕ້ ແລະ ຝ່າຍເໜືອ ຊຶ່ງສ່ວນຫລາຍແມ່ນຢູ່ຝັ່ງຂວາແມ່ນ້ຳຂອງ ມີອີກ 86 ຫົວເມືອງ ຊຶ່ງລ້ວນແຕ່ມີການຈັດຕັ້ງປົກຄອງແໜ້ນໜາດີສົມຄວນ.

ດ້ານການເມືອງ: ເພື່ອເຮັດໃຫ້ແຜນການທ້ອນໂຮມລາວ ແລະ ປະກາດເອກະລາດແຫ່ງຊາດສຳເລັດຜົນນັ້ນ ເຈົ້າ ອະນຸວົງ ໄດ້ດຳເນີນນະໂຍບາຍການເມືອງພາຍໃນ ແລະ ຕ່າງປະເທດ ຢ່າງເໝາະສົມຊຶ່ງສະແດງອອກ ຄື:

ນະໂຍບາຍການເມືອງພາຍໃນ: ເຈົ້າ ອະນຸວົງ ໄດ້ສ້າງຄວາມສາມັກຄີຮັກແພງ ແລະ ໃກ້ສິດຕິດແທດກັບຫົວເມືອງທີ່ຂຶ້ນກັບວຽງຈັນ ທັງໝົດ 165 ຫົວເມືອງ ຢ່າງເປັນປະຈຳ ໂດຍໃຫ້ບັນດາເຈົ້າເມືອງເຫລົ່ານັ້ນເຂົ້າມາພົບ ແລະ ສາບານຕົວຢູ່ວັດສີສະເກດ ວຽງຈັນ ແລະ ດ້ວຍການເດີນທາງໄປຊີ້ນຳການສ້າງສາ ແລະ ໄປສະເຫລີມສະຫລອງປາງບຸນຕ່າງໆ.

ຕໍ່ອານາຈັກພວນຊຽງຂວາງ ເຈົ້າ ອະນຸວົງ ໄດ້ສ້າງສາຍສຳພັນອັນດີ ແລະ ໄດ້ໃກ້ສິດຕິດແທດກັບ ເຈົ້າ ນ້ອຍ ເຊັ່ນເວລາທີ່ ເຈົ້າ ນ້ອຍ ຖືກຈັບລົງວຽງຈັນ ໃນປີ 1823 ເຈົ້າ ອະນຸວົງ ກໍບໍ່ໄດ້ກັກຂັງ ເຈົ້າ ນ້ອຍ ຜູ້ກ່ຽວຄືກັນກັບນັກໂທດອື່ນໆ ແຕ່ໄດ້ໃຫ້ພັກຢູ່ໃນພາລາຊະສຳນັກວຽງຈັນ ແລະ ໄດ້ເອົາໃຈໃສ່ອົບຮົມ ເຈົ້າ ນ້ອຍ ໃນທາງທີ່ດີຈົນ ເຈົ້າ ນ້ອຍ ຍອມປະຕິບັດຕາມຄຳແນະນຳຂອງ ເຈົ້າ ອະນຸວົງ. ຕໍ່ມາເຈົ້າ ນ້ອຍ ກໍໄດ້ເອົາເມຍຂອງຕົນ ຊຶ່ງແມ່ນລູກສາວຂອງ ເຈົ້າ ອະນຸວົງ ເອງ ມາຢູ່ ວຽງຈັນ ຕໍ່ຈາກນັ້ນ ເພິ່ນຈຶ່ງສົ່ງລູກເຂີຍ ຂຶ້ນໄປຄອງແຄວ້ນພວນຊຽງຂວາງ ໂດຍໃຫ້ຂຶ້ນກັບ ວຽງຈັນ ເລີຍ.

ຕໍ່ອານາຈັກ ຫລວງພະບາງ ທີ່ມີຄວາມອາຄາດບາດໝາງກັນແຕ່ດົນນານນັ້ນ, ເຈົ້າ ອະນຸວົງ ກໍໄດ້ພະຍາຍາມຕິດຕໍ່ພົວພັນ, ສ້າງຄວາມສຳພັນໄມຕີອັນດີງາມກັບ ເຈົ້າ ມັນທາຕຸລາດຕະຫຼອດມາ ເພື່ອໃຫ້ລືມເຫດການເກົ່າທີ່ເຄີຍຜິດຂ້ອງຕ້ອງຖຽງກັນ, ອາຄາດບາດໝາງ ແລະ ແຕກແຍກກັນ ຊຶ່ງເກີດຈາກເລ່ຫ໌ນຍຸແຍ່ຂອງຕ່າງຊາດ ແລ້ວໃຫ້ຫັນມາຮ່ວມກັນຕໍ່ສູ້ກູ້ເອກະລາດໃຫ້ຊາດຂອງຕົນ. ໃນປີ 1819 ເຈົ້າ ອະນຸວົງ ໄດ້ແຕ່ງຕັ້ງໃຫ້ ໝື່ນເຮືອຄຳ ເປັນທູດສົ່ງເຮືອຄຳ 2 ເຫຼັ້ມ ໄປໃຫ້ ເຈົ້າ ມັນທາຕຸລາດ ຢູ່ນະຄອນຫຼວງພະບາງ ເພື່ອຜູກໄມຕີສຳພັນຕໍ່ກັນ ໃນປີຕໍ່ມາກໍໄດ້ສົ່ງຊ້າງໂຕ ໜຶ່ງສູງ 7 ສອກ ໄປໃຫ້ອີກ.

ຕໍ່ອານາຈັກ ຈຳປາສັກ ເຈົ້າ ອະນຸວົງ ກໍໄດ້ພະຍາຍາມຊອກຫາໂອກາດທ້ອນໂຮມເຂົ້າກັບ ວຽງຈັນ ໂດຍສັນຕິວິທີ ໂດຍທີ່ສຸດກໍສາມາດສົ່ງ ເຈົ້າ ລາຊະບຸດໂຍ້ ໄປຄອງອານາຈັກນີ້ໄດ້ເປັນຢ່າງດີ.

ນະໂຍບາຍການເມືອງກັບພາຍນອກ ເຊັ່ນ: ຕ່າງປະເທດ ທີ່ມີອິດທິພົນຫລາຍ ຕໍ່ອານາຈັກລາວລ້ານຊ້າງວຽງຈັນ ໃນເວລານັ້ນອານາມ ແລະ ສະຫຍາມ, ເຈົ້າ ອະນຸວົງ ກໍໄດ້ພະຍາຍາມສ້າງສາຍພົວພັນອັນດີ ແລະ ເປັນປົກກະຕິທັງສອງປະເທດນີ້ ຕ່າງກໍຕ້ອງການມີອຳນາດໃນອານາຈັກລາວລ້ານຊ້າງຄືກັນ.

ເພື່ອສ້າງຄວາມສຳພັນອັນດີ ກັບອານາຈັກສັກດິນາດ້ານຫວຽດ ທີ່ພວມມີອິດທິພົນສູງ ຢູ່ອານາມ, ເຈົ້າ ອະນຸວົງ ກໍໄດ້ສົ່ງກອງທັບລາວໄປຊ່ວຍພວກ ຫງວຽນວັນ ປາບພວກ ໄຕເຊີນ ຫລາຍຄັ້ງອັນໄດ້ຊ່ວຍໃຫ້ພວກ ຫງວຽນວັນ (Nguyen - Van) ສາມາດຢຶດເມືອງໄວ້ໄດ້ ໃນປີ 1800 ແລະ ສາມາດຢຶດຕົງແກງໄດ້ ໃນປີ 1802 ແລະ ຫງວຽນວັນ ໄດ້ກ້າວຂຶ້ນເປັນຈັກກະພັດ " ຢ່າລອງ " ເຈົ້າ ອະນຸວົງ ໄດ້ຮັດແໜ້ນສາຍສຳພັນກັບພວກ ຢ່າລອງ ໂດຍສະເພາະກັບກຸ່ມວົງຕະກຸນຫງວຽນ. ເພິ່ນໄດ້ສົ່ງສານເຄື່ອງບັນນາການ ແລະ ລາຊະທູດ ໄປອານາມຫລາຍຄັ້ງ ແລະ ຝ່າຍອານາມ ກໍໄດ້ສົ່ງສານ ແລະ ມີເຄື່ອງຊອງຕອບແທນຢ່າງເໝາະສົມ ເຮັດໃຫ້ສາຍສຳພັນທັງສອງປະເທດ ໜັກແໜ້ນຂຶ້ນ ຈົນເປັນເຫດໃຫ້ສັກດິນາສະຫຍາມ ແລະ ດ້ານຫວຽດຜິດຖຽງກັນ.

ຕໍ່ສັກດິນາສະຫຍາມ ຜູ້ຢຶດຄອງລາວນັ້ນ ເຈົ້າ ອະນຸວົງ ໄດ້ເອົາໃຈໃສ່ພິເສດທັງສ້າງສາຍສຳພັນອັນດີ ທັງຊອກຫາການໂອກາດອັນເໝາະສົມ ເພື່ອລຸກຮື້ຂຶ້ນຍາດເອົາເອກະລາດ ເຈົ້າ ອະນຸວົງ ໄດ້ມີຄວາມໃກ້ຊິດຕິດແທດ ແລະ ສະໜິດສະໜົມກັບລາຊະວົງຈັກກີ ມາດົນນານແລ້ວ ໂດຍສະເພາະ ກັບລາຊະການ ທີ 2 ແລະ ທີ 3. ປີ 1805 ເຈົ້າ ອະນຸວົງ ໄດ້ສົ່ງຊ້າງເຜືອກ ຊຶ່ງ ແມ່ນຊ້າງ ທີ່ມີລັກສະນະພິເສດ ລົງໄປໃຫ້ເຈົ້າຊີວິດສະຫຍາມ ເພື່ອສະແດງເຖິງຄວາມຈົ່ງຮັກພັກດີ ແລະ ຊ້າງໂຕນີ້ ກໍເປັນທີ່ພໍໃຈຂອງເຈົ້າຊີວິດສະຫຍາມທີ່ຊົງຊື່ວ່າ " ຊ້າງມຸງຄຸນເລີດຟ້າ ".

ໃນປີ 1809 ພະຍາຈັກກີ ໄດ້ຂຽນຈົດໝາຍມາຫາ ເຈົ້າ ອະນຸວົງ ຝາກຄວາມຮັກ ແລະ ຄວາມຄິດເຖິງ ເຊັ່ນກ່າວວ່າ " ຖ້າເທສະການແຕ່ງເກ່ົາ ແລະ ລ້ຽງດູຊ້າທູນລະອອງຄັ້ງໃດ ກໍມີພະລາຊາທະລືໄທຄິດເຖິງເຈົ້າວຽງຈັນທຸກຄັ້ງ ດ້ວຍບ່ໄດ້ລົງໄປເຫັນ ຈົ່ງໂຜດໃຫ້ຖ່າຍຢ່າງແຜນສະເກ່ົາເກ່ົາໃໝ່ ພະລາຊະທານຂຶ້ນມາໃຫ້ເຈົ້າວຽງຈັນ ດູພໍເປັນສຳເນົາພາງ ຖ້າເຈົ້າວຽງຈັນ ຫວ່າງລາຊະການເມື່ອໃດ ຈະລົງໄປເຝົ້າທູນລະອອງທີ່ ກຸງເທບ ກໍໃຫ້ພະບຸດພະລຽງມະໂຫລີລະຄອນກັບໃຫ້ຫາພາຍ ແລະ ນົກເຂົ້າຄາລົມ ລົງໄປດ້ວຍຈະໄດ້ຫລິ້ນຕາມສະບາຍໃຈ ເປັນເຮືອສຳລັບພາຍຫລິ້ນ ແລະ ກົ່ງໄມ້ ທີ່ໜ້າແຂວນນົກ ນັ້ນ ມີຢູ່ເປັນອັນມາກ".

ໃນປີ 1812 ເຈົ້າ ອະນຸວົງ ໄດ້ສົ່ງ ຊ້າງເຜືອກ ອີກໂຕໜຶ່ງລົງໄປບາງກອກ. ເຈົ້າຊີວິດສະຫຍາມໄດ້ຕັ້ງຊື່ວ່າ " ພະບໍລິມມະນາເຄນ " ແລະ ປີ 1816 ເຈົ້າ ອະນຸວົງ ໄດ້ສົ່ງຊ້າງເຖິກງາດ່າງສັ້ນ (ຊ້າງເພຍນຽມ) ລົງໄປ ບາງກອກ ເຈົ້າຊີວິດສະຫຍາມໄດ້ຕັ້ງຊື່ ວ່າ " ຊ້າງມຸງຄຸນເລີດຟ້າ "

ນອກຈາກນີ້ ເຈົ້າ ອະນຸວົງ ໄດ້ເອົາໃຈໃສ່ປະຕິບັດຕາມທຳນຽມຫົວເມືອງສ່ວຍ ຢ່າງຄົບຖ້ວນ ເຊັ່ນ: ໄດ້ສົ່ງເຄື່ອງລາຊະບັນນາການບໍ່ໄດ້ຂາດ ໄດ້ເກັບເກນປະຊາຊົນລາວ ໄປຊ່ວຍວຽກງານ ຢູ່ ບາງກອກ ຕາມທີ່ພວກສະຫຍາມຕ້ອງການ ແລະ ອື່ນໆ ເຮັດໃຫ້ມີການພົວພັນອັນດີ ກັບ ບາງກອກ.

ດ້ານເສດຖະກິດ: ເພື່ອກຽມໃຫ້ແກ່ການລຸກຮື້ຂຶ້ນ ຍາດເອົາເອກະລາດນັ້ນ ເຈົ້າ ອະນຸວົງ ໄດ້ເອົາໃຈໃສ່ປັບປຸງວຽກງານດ້ານເສດຖະກິດ - ສັງຄົມ ແລະ ວັດທະນະທຳ ເປັນປະຈຳ. ສະ ເພາະດ້ານເສດຖະກິດ: ເພີ່ນໄດ້ສົ່ງເສີມໃຫ້ປະຊາຊົນ ແຕ່ລະເມືອງເຮັດໄຮ່ເຮັດນາ ເພື່ອໃຫ້ກຸ້ມ ຕົນເອງ ແລະ ເສຍພາສີເຂົ້າຄັງຫລວງ ເພື່ອກຽມແຮໄວ້ໃນຕໍ່ໜ້າ ວຽກງານການປູກຝັງທັງໝົດ ແມ່ນຢູ່ໃນຄວາມຮັບຜິດຊອບຂອງ ກວານໂພຊະນາ ພິເສດແມ່ນພາຍໃນເມືອງວຽງຈັນ ກໍໄດ້ມີ ການເຮັດນາພາຍໃນກຳແພງເມືອງ ຊຶ່ງເອີ້ນວ່າ " ນາຫລວງ " ເຂດຜະລິດສະບຽງອາຫານ ທີ່ສຳ ຄັນຂອງລາວ ໃນສະໄໝນັ້ນ ແມ່ນຢູ່ທາງຝັ່ງຂວາແມ່ນ້ຳຂອງ. ນອກຈາກການປູກເຂົ້າແລ້ວ ຍັງ ມີການປູກມອນ, ປູກປ່ານ, ປູກປໍ, ຕຳແຜ່ນ ໂດຍສະເພາະ ຜູ້ຊາຍທີ່ສ້າງຄອບຄົວແລ້ວ ຕ້ອງ ເສຍສ່ວຍເປັນໄໝ ຫລື ປ່ານໃຫ້ຄັງໜວງ ແລະ ເພື່ອເປັນສ່ວຍໃຫ້ສະຫຍາມ. ນອກຈາກການສົ່ງ ເສີມການເຮັດໄຮ່ເຮັດນາແລ້ວ ເພີ່ນຍັງໄດ້ປັບປຸງດ້ານຄົມມະນາຄົມຄືໃຫ້ຕໍ່ເຮືອ, ເຮັດລໍ້, ເຮັດກ ວຽນເພີ່ນຍັງໄດ້ສ້າງຂົວຂ້າມແມ່ນ້ຳຂອງ ໃນປີ 1810 ລະຫວ່າງວຽງຈັນ ກັບສີຊຽງໃໝ່ ຕໍ່ມາເຈົ້າ ອະນຸວົງ ໄດ້ໃຫ້ສ້າງສາງເຂົ້າຂຶ້ນຢູ່ສີຊຽງໃໝ່, ບ້ານ ພັນພ້າວ ຊຽງຄານ ແລະ ທັງຕັ້ງໂຮງສີເຂົ້າ ຂຶ້ນຂະໜາດໃຫຍ່ ເພື່ອກຽມສີເອົາເຂົ້າສານ ລຳລຽງສົ່ງກອງທັບ ໃນເວລາລຸກຮື້ຂຶ້ນຍາດເອົາເອ ກະລາດຈາກສະຫຍາມ.

ດ້ານສັງຄົມ: ເຈົ້າ ອະນຸວົງ ຖືວ່າຄວາມສະຫງົບສຸກ ຂອງປະຊາຊົນບັນດາເຜົ່າ ແມ່ນສິ່ງ ສຳຄັນ ແລະ ເປັນຂໍ້ສະດວກໃຫ້ແກ່ການລຸກຮື້ຂຶ້ນຍາດເອົາເອກະລາດ ສະນັ້ນ ເພີ່ນຈຶ່ງໄດ້ເອົາ ໃຈໃສ່ປັບປຸງການຈັດຕັ້ງ ພາຍໃນໃຫ້ເຂັ້ມແຂງໃນທຸກຫົວເມືອງ ໂດຍສະເພາະ ເມືອງທີ່ຢູ່ຊາຍ ແດນ ຈຶ່ງເອົາໃຈໃສ່ປ້ອງກັນການຮຸກຮານ ທີ່ຈະມາຈາກພາຍນອກ ເຈົ້າ ອະນຸວົງ ໄດ້ມີຄຳສັ່ງໃຫ້ ຂັດຂວາງພວກສັກເລກທີ່ມາຈາກໂຄລາດ ແລະ ບາງກອກ ແລ້ວເລັຍເຂົ້າມາໃນຫົວເມືອງວຽງ ຈັນ. ມາສ້າງຄວາມເດືອດຮ້ອນໃຫ້ແກ່ປະຊາຊົນລາວ, ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ຈັບເຈົ້າເມືອງ ກາ ລະສິນ ຂ້າເສຍໂດຍອ້າງວ່າ: ເຈົ້າເມືອງ ກາລະສິນ ນັ້ນເຮັດໃຫ້ຄັດເຄືອງພະໄທຫລາຍຄັ້ງທີ່ຂຶ້ນ ກັບສະຫຍາມ ກວາດຕ້ອນເອົາຄົນອຸປະຖາກພະທາດ ແລະ ພວກຊາວຜູ້ໄທ ເຄັຍຫ້າມກໍບໍ່ຟັງ ສ່ວນການແຊກແຊງ ທີ່ມາຈາກພວກອາມາມ ໃນສະໄໝເຈົ້າ ອະນຸວົງ ແມ່ນປະກົດວ່າບໍ່ມີ, ສະ ນັ້ນ ເວົ້າລວມແລ້ວ ສະພາບການດ້ານສັງຄົມ ຈຶ່ງສະຫງົບສົມຄວນ. ເຮັດໃຫ້ປະຊາຊົນລາວ ມີ ໂອກາດສ້າງສາພັດທະນາ, ສ່ວນຊົນຊັ້ນໃນສັງຄົມ ມີພຽງແຕ່ 2 ຊົນຊັ້ນ ຕົ້ນຕໍຄື ສັກດິນາ ແລະ

ຊາວນາ ພວກກົດຂີ່ຂູດຮີດ ຕົ້ນຕໍ ແມ່ນມາຈາກສັກດິນາສະຫຍາມສ່ວນສັກດິນາລາວ ແລະ ບັນ ດາເສນາອາມາດ ສ່ວນຫລາຍແມ່ນສຸມໃສ່ວຽກງານຕໍ່ສູ້ ຍາດເອົາເອກະລາດ ແຫ່ງຄວາມເປັນ ເອກະລາດຂອງປະເທດຊາດ ຈຶ່ງກົດຂີ່ຂູດຮີດໜ້ອຍ ອັນສຳຄັນແມ່ນທັງສອງຊົນຊັ້ນ ໄດ້ສາມັກ ຄີ ພ້ອມກັນລຸກຮື້ຂຶ້ນຕໍ່ສູ້ ຍາດເອົາເອກະລາດ ຈາກສັກດິນາສະຫຍາມ ດ້ວຍຈິດໃຈຟົດຟື້ນ.

ດ້ານວັດທະນະທຳ: ປະຊາຊົນລາວ ກໍໄດ້ສືບຕໍ່ຮັກສາຮີດຄອງປະເພນີລາວຢ່າງຄົບຖ້ວນ ຕາມທີ່ເຄີຍນັບຖືມາ ໂດຍສະເພາະ ແມ່ນການນັບຖືສາສະໜາພຸດ ແລະ ການປະຕິບັດຕາມ ຮີດ 12 ຄອງ 14 ປະຊາຊົນ ແມ່ນອາໄສວັດເປັນບ່ອນສຶກສາຮ່ຳຮຽນ, ເປັນບ່ອນອົບຮົມສັ່ງສອນ ທຸກສິ່ງຢ່າງ. ບັນດາສິລະປະ ວັນນະຄະດີ ວັດທະນະທຳຕ່າງໆ ລ້ວນແຕ່ອອກມາຈາກວັດ, ອັນ ພິເສດກວ່າໝູ່ ໃນສະໄໝ ເຈົ້າ ອະນຸວົງ ແມ່ນປະກົດມີວັນນະຄະດີ ທີ່ມີລັກສະນະຕໍ່ສູ້ຕ້ານສະ ຫຍາມ ເຊັ່ນ: ມີຄຳຜະຫຍາ, ມີເລື່ອງຊຽງໜຶ້ງ ແລະ ມີສານລຶບພະສູນ. ໂດຍສະເພາະ ສານລຶບ ພະສູນ ນັ້ນແມ່ນແຜ່ຫລາຍ ໃນສະໄໝ ເຈົ້າ ອະນຸວົງ ຈຶ່ງເຊື່ອວ່າແມ່ນ ເຈົ້າລາຊະວົງ ເປັນຜູ້ນຳ ໃຊ້ເຂົ້າໃນການປຸກລະດົມ ປະຊາຊົນລາວ ໃຫ້ຍຶດແຄ້ນຕໍ່ສະຫຍາມຜູ້ຮຸກຮານ ແລະ ຢຶດຄອງ ລາວ ໄດ້ພ້ອມພຽງກັນລຸກຮື້ຂຶ້ນຕໍ່ສູ້ ຍາດເອົາຄວາມເປັນເອກະລາດ ນັກສິນລະປິນ ແລະ ນັກ ຂຽນຂອງລາວ ໃນສະໄໝນັ້ນ ມີການແຜ່ຫລາຍ ບໍ່ວ່າຢູ່ໃນປະເທດລາວປະຈຸບັນ, ແຕ່ສ່ວນໃຫຍ່ ກໍແມ່ນຢູ່ນຳພວກອີສານຂອງໄທ.

ວັນນະກຳ ເລື່ອງ ສານລຶບພະສູນ ແບ່ງອອກເປັນ 3 ບັ້ນ ຄື: ບັ້ນບັງລະຫັດ, ບັ້ນສົມທີ່ຄິດ, ບັ້ນສຸດທີ່ອ່າວ ຊຶ່ງເນື້ອໃນຂອງສານນີ້ ແມ່ນສ່ອງແສງໃຫ້ເຫັນເຖິງຮູບພາບຂອງດວງຈັນ ຖືກລາ ຫູ ເຂົ້າບັງບິດຄືເມືອງວຽງຈັນ ນະຄອນຫລວງຂອງລາວ ຖືກຕ່າງຊາດເຂົ້າຢຶດຄອງ, ນາກຖືກ ຄຸດ ເປ່ງ ລັດສະໝີເຂົ້າກວມນາກ ຄືປະຊາຊົນລາວ ຖືກຄຸດຄືພວກສັກດິນາສະຫຍາມ ເຂົ້າມາຮຸກ ຮານ ແລະ ຢຶດຄອງລາວ ປະຊາຊົນ ໄດ້ລົ້ມຕາຍຫາຍຈາກທຸກຍາກຂາດເຂີນ ເວົ້າລວມແລ້ວ ແມ່ນສ່ອງແສງໃຫ້ເຫັນປະເທດຊາດ ໄດ້ສູນເສຍເອກະລາດ ແລະ ອິດສະຫລະພາບ ຢາກກອບ ກູ້ເອກະລາດ ແລະ ອິດສະຫລະພາບຄືນມາໄດ້ນັ້ນ ມີເສັ້ນທາງດຽວເທົ່ານັ້ນ ຄືໃຫ້ພ້ອມກັນຕັດ ສິນໃຈຢ່າງເດັດດ່ຽວ ແລ້ວລຸກຂຶ້ນຕໍ່ສູ້ກູ້ຊາດ ດ້ວຍກຳລັງອາວຸດ ຊຶ່ງຄຳຮຽກຮ້ອງອັນນີ້ ເຊື່ອວ່າ ແມ່ນເປັນຂອງ ເຈົ້າ ອະນຸວົງ ທີ່ເພີ່ນໄດ້ຮູ້ບົດຮຽນຈາກ ເຈົ້າ ນັນທະເສນ ແລະ ເຈົ້າ ອິນທະວົງ ວັນນະກຳເລື່ອງນີ້ ແມ່ນວັນນະກຳຊັ້ນຢັ່ງມເລື່ອງໜຶ່ງ ໃນວັນນະກຳສະໄໝສັກດິນາລາວ ເສື່ອມ ອຳນາດ, ປະຊາຊົນໄດ້ນິຍົມອ່ານຢ່າງແຜ່ຫລາຍ ໂດຍສະເພາະ ໃນປາງບຸນປະເພນີ ແລະ ບຸນ ງັນເຮືອນດີ ເປັນຕົ້ນ.

ແຜ່ນສິລາຈາລຶກ ສະໄໝ ເຈົ້າ ອະນຸວົງ ທີ່ຍັງເຫລືອຢູ່ ວັດສີສະເກດ ທຸກວັນນີ້ ກໍແມ່ນ ຫລັກຖານຢັ້ງ " ຢືນວ່າສະໄໝ ເຈົ້າ ອະນຸວົງ ແມ່ນມີເອກະສານສະເພາະຂອງຕົນ ທາງດ້ານອັກ ສອນສາດ ແລະ ສິລະປະ ໃນການກໍ່ສ້າງທັງໝົດບໍ່ວ່າຈະຢູ່ຝັ່ງຊ້າຍ ແລະ·ຂວາຂອງແມ່ນ້ຳຂອງ ທີ່ ເຈົ້າ ອະນຸວົງ ນຳພາສ້າງຂຶ້ນມານັ້ນ ເຊັ່ນຢູ່ ສີສະເກດ ກໍລ້ວນແຕ່ຢັ້ງຢືນວ່າສະໄໝ ເຈົ້າ ອະນຸ ວົງ ແມ່ນມີລັກສະນະສະເພາະທາງດ້ານສິລະປະ ຂອງຕົນເອງທີ່ເດັ່ນ ແລະ ເປັນທີ່ເອກອ້າງໄດ້.

ຍ້ອນເຈົ້າ ອະນຸວົງ ໄດ້ເອົາໃຈໃສ່ຕໍ່ການນຳພາ ປະຊາຊົນລາວ ບູລະນະສ້າງສາປະເທດ ຊາດ ຢ່າງຮອບດ້ານ ຄືດັ່ງກ່າວມານັ້ນ ຈຶ່ງເຮັດໃຫ້ປະເທດຊາດ ມີຄວາມຈະເລີນຮຸ່ງເຮືອງ ມີ ຄວາມເຂັ້ມແຂງທາງດ້ານການທະຫານ ແລະ ການປົກຄອງມີແນວຄິດຮັກຊາດສູງ, ກຽມພ້ອມສູ້ ຮົບ ແລະ ມີຄວາມກ້າວໜ້າທາງດ້ານເສດຖະກິດ - ສັງຄົມ - ວັດທະນະທຳ ສູງສົມຄວນ.

ໃນເວລາທີ່ ເຈົ້າ ອະນຸວົງ ພວມບູລະນະສ້າງສາປະເທດຊາດ ໃຫ້ເຂັ້ມແຂງຮອບດ້ານ ເພື່ອກຽມລຸກຮື້ຂຶ້ນຕໍ່ສູ້ຍາດເອົາເອກະລາດນັ້ນ, ຢູ່ ຈຳປາສັກ ກໍມີຂະບວນການຕໍ່ສູ້ຕ້ານສັກດິນາ ສະຫຍາມນຳໂດຍ ພະສາກຽດໂງ້ງ. (ຄູບາສາກຽດໂງ້ງ) .

ພະສາ ຊຶ່ງແມ່ນຄົນທີ່ມີເຊື້ອສາຍຈາກ ວຽງຈັນ ຖືກກວາດຕ້ອນໄປຢູ່ບ້ານ ຫລຸບເລົາເຕົ່າ ປູນ ແຂວງ ສາລະບູລີ, ຍ້ອນອົດທົນຕໍ່ການກົດຂີ່ຂູດຮີດຂອງສັກດິນາສະຫຍາມບໍ່ໄດ້ ເພີ່ນຈຶ່ງ ອອກບວດ ເພື່ອຊອກຫາຊ່ອງທາງຕໍ່ສູ້ຕ້ານສະຫຍາມ. ເພີ່ນໄດ້ປະພຶດຕົນ ເປັນພະກຳມະຖານ ແລ້ວ ລົງປະຕິບັດທຳທິ່ວສັງຄົມ, ຈາກ ສະລະບູລີ ໄປຕາມເມືອງຕ່າງໆ ໃນເຂດຂອງເມືອງນະ ຄອນລາຊະສີມາ ແລະ ຈຳປາສັກ ເພື່ອປຸກລະດົມໃຫ້ປະຊາຊົນຄຽດແຄ້ນຕໍ່ສະຫຍາມ ແລ້ວລຸກ ຮື້ຂຶ້ນຍາດເອົາເອກະລາດ. ຍ້ອນເພີ່ນເປັນຜູ້ມີຄວາມຮູ້ຄວາມສາມາດຫລາຍດ້ານ ທັງມີເວດມົນ ກົນຄາຖາ ແລະ ມີຄວາມຮັກຊາດຢ່າງດູດດື່ມ ເພີ່ນຈຶ່ງມີຄົນນັບຖືຫລາຍ. ເພີ່ນໄດ້ສະໝັກພັກ ພວກຕັ້ງຂະບວນຜູ້ທີ່ມີບຸນຂຶ້ນຢູ່ ພູກຽດໂງ້ງ ພູອາສາ ໃນປີ 1817 ຊຶ່ງຢູ່ຝັ່ງຕາເວັນອອກ ໃກ້ກັບ ເມືອງ ຈຳປາສັກ. ພະສາ ແລະ ຄະນະຂອງເພີ່ນ ໄດ້ອອກເດື່ອນໄຫວຫລາຍບ່ອນ ເຊັ່ນ: ສາລະ ວັນ, ຄຳທອງ, ວັດຕະປື ແລະ ຈຳປາສັກ ເພື່ອປຸກລະດົມປະຊາຊົນ ໃຫ້ເຂົ້າຮ່ວມຂະບວນລຸກຮື້ ຂຶ້ນຕໍ່ສູ້. ຍ້ອນຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງພະສາ ຢູ່ພູກຽດໂງ້ງ ປະຊາຊົນ ຈຶ່ງເອີ້ນວ່າ ພະສາ ກຽດໂງ້ງ ແລະ ປະຊາຊົນ ຍັງເຊື່ອວ່າພະສາ ແມ່ນຜູ້ມີບຸນ ຄືທ້າວ ເຈືອງ (ທ້າວຮຸ່ງ) ມາເກີດ ເພື່ອປາບ.

ເມື່ອທ້າຍປີ 1825, ເຈົ້າ ອະນຸວົງ ໄດ້ເປີດກອງປະຊຸມປຶກສາຫາລື ເລື່ອງເຮັດສົງຄາມຢູ່ ໃນພະລາຊະວັງວຽງຈັນ ໂດຍມີ ແສນທ້າວພະຍາລາວ ທີ່ເປັນຂຸນນາງຜູ້ໃຫຍ່ຜູ້ນ້ອຍ ທີ່ສຳຄັນ ໄດ້ແກ່ເຈົ້າ ມະຫາອຸປະຣາດຕິດສະ, ເຈົ້າ ສຸດທິສານໂປ້, ເຈົ້າ ລາຊະວົງເທງົ້າ, ເຈົ້າ ລາຊະບຸດ

ໂຍ້ ກັບເຈົ້າລູກຫຼານຜູ້ໃຫຍ່ອື່ນໆ ທີ່ຊຳນານໃນການເສິກສົງຄາມ ໃຫ້ມາພ້ອມພຽງກັນ ພ້ອມ ດ້ວຍພວກເພຍ ແລະ ກວານຕ່າງໆ ເຊັ່ນ: ເພຍເມືອງຈັນ, ເພຍເມືອງແສນ, ກວານວຽງ, ກວານ ໂພຊະນາ, ກວານຊານິນ... ເມື່ອມາພ້ອມກັນແລ້ວ ເຈົ້າ ອະນຸ ຈຶ່ງປຶກສາວ່າ: " ທຸກວັນນີ້ຢູ່ ບາງ ກອກ ມີແຕ່ເຈົ້ານາຍນ້ອຍໆທີ່ບໍ່ມີຄວາມຊຳນິຊຳນານໃນການເສິກສົງຄາມ ສ່ວນຂຸນນາງຜູ້ໃຫຍ່ ກໍມີບໍ່ຫຼາຍຝີມືໃນການຮົບກໍອ່ອນແອຍ້ອນວ່າ: ເວັ້ນສົງຄາມດົນນານແລ້ວ. ເຈົ້ານາຍຂຸນນາງ ທີ່ ຊຳນານໃນການເສິກ ເຄີຍຮົບກັບພະມ້າມີໄຊນັ້ນ ກໍລົ້ມຕາຍຫາຍຈາກກັນໄປໝົດແລ້ວ ບາງ ກອກ ດຽວນີ້ ຈຶ່ງອ່ອນກຳລັງລົງກວ່າແຕ່ກ່ອນຫຼາຍ ແລະ ດຽວນີ້ບັນດາຫົວເມືອງຕາມເສັ້ນທາງ ກໍບໍ່ມີສິ່ງໃດກີດຂວາງ ໂດຍສະເພາະ ພະຍາມະຄອນລາຊະສີມາ ກໍພວມຖືກລວງໃຫ້ຍົກທັບໄປ ເມືອງ ຂຸຂັນ ຢູ່ຫ່າງຈາກບ້ານເມືອງຂອງເຂົ້າແລ້ວ ນັບວ່າເປັນໂອກາດດີຂອງພວກເຮົາ ທີ່ຈະ ປະກາດເອກະລາດຈາກ ບາງກອກ ໃນມໍ່ໆນີ້ ເຮົາຈຶ່ງຄວນປະກາດເອກະລາດ ບໍ່ຂຶ້ນກັບສະ ຫຍາມຕໍ່ໄປ, ແລ້ວຍົກກອງທັບໄປຂັບໄລ່ພວກສະຫຍາມ ທີ່ຕັ້ງຢູ່ຕາມຫົວເມືອງຕ່າງໆ ໃຫ້ອອກ ໄປຈາກດິນແດນລາວໃຫ້ໝົດ ແລະ ສົ່ງກອງທັບໄປຮັບເອົາປະຊາຊົນລາວຢູ່ເມືອງ ສະລະບູລີ ຫຼື ຖ້າມີໂອກາດໃນເວລາທີ່ພວກອັງກິດ ເຂົ້າມາຕີ ບາງກອກ ທາງໜ້ານ້ຳ ພວກເຮົາກໍຍົກທັບ ລົງ ໄປຕີສະຫຍາມ ເພື່ອເອົາ ພະແກ້ວມໍລະກົດ ແລະ ມຸນມໍລະດົກຂອງລາວອື່ນໆ ຄືນມາໄວ້ ວຽງ ຈັນ ດັ່ງເດີມ ແລ້ວຕັ້ງກອງທັບປ້ອງກັນອານາຈັກລາວລ້ານຊ້າງ ໄວ້ຢ່າງເຂັ້ມແຂງ ໂດຍສະເພາະ ຢູ່ຊາຍແດນດ້ານຕາເວັນຕົກ ໃນຊ່ອງແຄບຕ່າງໆ ຈັດຕັ້ງປ້ອງກັນຢ່າງໜາແໜ້ນ. ຖ້າກອງທັບ ສະຫຍາມ ຈະມາຮົບກັບພວກເຮົາ ກໍຍາກຍ້ອນເສັ້ນທາງລຳລຽງສະບຽງອາຫານລຳບາກ ແລະ ໄກຫຼາຍຖ້າວ່າເຮັດເສິກເປັນປີ ພວກເຮົາກໍບໍ່ຢ້ານ, ລາດສະດອນໃນບັນດາຫົວເມືອງໃຫຍ່ນ້ອຍ ທີ່ຂຶ້ນກັບພວກເຮົາໃນເວລານີ້ ກໍມີຮອດ 165.050 ເມືອງ".

ເມື່ອບັນດາ ທ້າວ ແສນ ພະຍາລາວທັງປວງເຫັນດີເຫັນພ້ອມ ໝົດທຸກຄົນແລ້ວ ເຈົ້າ ອະ ນຸວົງ ພ້ອມກັບ ທ້າວ ແສນ ພະຍາລາວທັງໝົດ ກໍປະກາດອານາຈັກລາວລ້ານຊ້າງ ເປັນເອກະ ລາດບໍ່ຍອມຂຶ້ນກັບສະຫຍາມຕໍ່ໄປ. ແລ້ວເພີ່ນຈຶ່ງໃຫ້ກະກຽມກອງທັບຕ່າງໆ, ແບ່ງປັນໜ້າທີ່ກັນ ໃຫ້ໄປຂັບໄລ່ພວກສະຫຍາມ ອອກຈາກແຜ່ນດິນລາວໃຫ້ໝົດ, ທັງສັ່ງກະກຽມອົບພະຍົບປະຊາ ຊົນ ຫົວເມືອງຕ່າງໆ ມາໄວ້ວຽງຈັນ ເພື່ອກຽມຕີຕ້ານສະຫຍາມທີ່ຈະມາຮຸກຮານຄັ້ງໃໝ່.

ເພື່ອປະຕິບັດຕາມການຕົກລົງນັ້ນ ເຈົ້າ ອະນຸວົງ ກໍໄດ້ສັ່ງໃຫ້ ເຈົ້າ ອຸປະຮາດຕິດສະ ຍົກ ກອງທັບໄປຂັບໄລ່ສະຫຍາມ ໃຫ້ອອກຈາກຫົວເມືອງຕ່າງໆ ຢູ່ທິດຕາເວັນອອກສ່ຽງເໜືອ ຂອງ ໂຄລາດ ເຊິ່ງບັນດາຫົວເມືອງເຫຼົ່ານັ້ນ ສ່ວນຫຼາຍແມ່ນຂຶ້ນກັບລາວ ແລະ ສ່ວນໜຶ່ງຂຶ້ນໂດຍກົງ ຕໍ່ ບາງກອກ ເຊັ່ນ: ເມືອງ ກາລະສິນ, ຮ້ອຍເອັດ, ສຸວັນນະພູມ, ຊົນນະບົດ, ຂອນແກ່ນ... ເຈົ້າ

ອຸປະຣາດຕິດສະ ໄດ້ຍົກກອງທັບໃຫຍ່ໄປ ເມືອງ ກາລະສິນ ກ່ອນ. ຍ້ອນເຈົ້າເມືອງ ກາລະສິນ ໄດ້ແຍກຕົວອອກຈາກ ວຽງຈັນ ໄປຂຶ້ນກັບບາງກອກ, ທັງນຳເອົາພວກສະຫຍາມມາກົດຂີ່ຂູດຮີດ ປະຊາຊົນ ຢູ່ເປັນປະຈຳ. ຍ້ອນຕົກຖືກເລ່ກົນຂອງສະຫຍາມ ເຮັດໃຫ້ປະຊາຊົນລາວ ເສຍຫາຍ ເພີ່ນຈຶ່ງໄດ້ສັ່ງໃຫ້ຈັບຕົວ ພະຍາ ໄຊສຸນທອນແພງ ເຈົ້າເມືອງ ກາລະສິນ ແລະ ເອົາມາຂ້າເສຍ ໃນທ້າຍປີ 1825 ນັ້ນ ແລ້ວນຳສົບໄປສົບປະຈານໄວ້ກາງເມືອງ. ສ່ວນຕົວແທນຂອງພວກສັກດິນາສະຫຍາມ ທີ່ມາຕັ້ງກອງສັກເລກຢູ່ຕາມຫົວເມືອງໃກ້ຄຽງອື່ນໆ, ພໍຮູ້ວ່າກອງທັບໃຫຍ່ລາວ ຍົກມາຂັບໄລ່ພວກຕົນຄືແນວນັ້ນຈຶ່ງພາກັນປົບໜີ, ແລ້ວເຈົ້າເມືອງເຫຼົ່ານັ້ນ ກໍເຂົ້າຫາກອງທັບ ເຈົ້າ ອຸປະຣາດ ຢ່າງງ່າຍດາຍ ຫລັງຈາກນັ້ນ ເພີ່ນຈຶ່ງໃຫ້ອົບພະຍົບບັນດາຄອບຄົວ ປະຊາຊົນ ຂອງຫົວເມືອງເຫຼົ່ານັ້ນມາໄວ້ວຽງຈັນ. ຫຼັງຈາກເຂົ້າຢຶດເມືອງໄດ້ແລ້ວ ເຈົ້າ ອຸປະຣາດ ຈຶ່ງຕັ້ງກອງ ທັບຢູ່ຫັ້ນ ເພື່ອລໍຖ້າຄຳສັ່ງຈາກກອງທັບຫຼວງ. ສ່ວນເຈົ້າ ອະນຸວົງ ໄດ້ແຕ່ງຕັ້ງ ເຈົ້າ ໜໍ່ຄຳ ຜູ້ເປັນ ຫຼານຊາຍ ໃຫ້ຍົກກອງທັບໄປພາກເໜືອລາວ ເພື່ອຂັບໄລ່ຕົວແທນຂອງພວກສັກດິນາສະຫຍາມ ອອກຈາກພາກເໜືອໃຫ້ໝົດ. ເຈົ້າ ໜໍ່ຄຳ ພ້ອມທັງນາຍທະຫານທີ່ສຳຄັນຄື: ຊຽງຜາ, ຄຳເກີດ... ໄດ້ຍົກທັບໄປຮອດ ເມືອງ ຫຼວງພະບາງ, ເມືອງ ພວນ, ເມືອງ ຊຽງແສນ ຈົນຮອດ ເມືອງ ຊຽງຮຸ່ງ ເພື່ອຂັບໄລ່ພວກສັກດິນາສະຫຍາມອອກຈາກລາວແລະ ເພື່ອປັບປຸງການປົກຄອງຢູ່ພາກເໜືອ ລາວ, ທັງໃຫ້ເກັບເກນຄົນເຂົ້າກອງທັບ ເພື່ອເອົາມາຊ່ວຍວຽງຈັນ ໃນການປ້ອງກັນການຮຸກຮານ ຈາກສະຫຍາມຄັ້ງຕໍ່ໄປ.

ເຈົ້າ ອະນຸວົງ ໄດ້ສົ່ງເຈົ້າ ລາຊະບຸດໂຍ້ ເຈົ້າເມືອງ ຈຳປາສັກ ຍົກທັບຈາກ ຈຳປາສັກ ໄປ ຂັບໄລ່ພວກສະຫຍາມ ອອກຈາກຫົວເມືອງຢູ່ທິດຕາເວັນອອກ ເມືອງ ໂຄລາດ ເຊັ່ນ: ເມືອງ ເຂັມມະລາດ, ເມືອງ ຊຸຂັນ, ເມືອງ ສີສະເກດ, ເມືອງ ເດດອຸດົມ, ເມືອງ ຍະໂສທອນ... ແລ້ວໃຫ້ ອົບພະຍົບຄອບຄົວມາວຽງຈັນ ແລະ ໃຫ້ເຫຼືອໄວ້ພຽງແຕ່ຈຳນວນໜຶ່ງ ເພື່ອປ້ອງກັນຫົວເມືອງ. ຫລັງຈາກນັ້ນ ກໍໃຫ້ຍົກກອງທັບໃຫຍ່ໄປຊ່ວຍກັນຕີ ນະຄອນລາຊະສີມາ ແລະ ໃຫ້ໄປເຖິງພ້ອມ ກັນຕາມກຳນົດໄວ້ ຄືໃນເດືອນ ສາມລາວ ປີ 1826 ປະຕິບັດຕາມຄຳສັ່ງນັ້ນ ເຈົ້າ ລາຊະບຸດໂຍ້ ໄດ້ຍົກກອງທັບໃຫ່ຍ ໄປຂັບໄລ່ຕົວແທນຂອງພວກສັກດິນາສະຫຍາມ ອອກຈາກບັນດາຫົວ ເມືອງຕ່າງໆ ນອກຈາກນັ້ນ ກໍໃຫ້ອົບພະຍົບຄອບຄົວ ທັງພ້ອມຈັດການປ້ອງກັນ ໃຫ້ເປັນທີ່ສຳ ເລັດຮຽບຮ້ອຍແລ້ວ ຈຶ່ງຍົກກອງທັບໃຫຍ່ໄປໂຄລາດ.

ສ່ວນກອງທັບສ່ວນກາງນັ້ນ ເຈົ້າ ອະນຸວົງ ໄດ້ຍົກຂ້າມນ້ຳຂອງ ໄປຕັ້ງຢູ່ ບ້ານ ພັນພ້າວ ແຕ່ທ້າຍປີ 1825 ແລ້ວ ເພື່ອພັກເຊົາກະກຽມ ແລະ ຝຶກແອບທະຫານໃຫ້ຮຽບຮ້ອຍ. ພໍເຖິງ ເດືອນ 4 ແຮມ 13 ຄ่ຳ ປີ ຈໍ (1826), ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ ເຈົ້າ ລາຊະວົງ ເປັນແມ່ທັບຄຸມ

ທະຫານ 5000 ຄົນ ເປັນກອງທັບໜ້າ, ຍົກທັບລົງໄປ ໂຄລາດ ກ່ອນ, ສ່ວນກອງທັບຫຼວງໄດ້ຍົກທັບລົງ ໄປ ໂຄລາດ ໃນມື້ຕໍ່ມານັ້ນເອງ, ກອງທັບເຈົ້າ ລາຊະວົງ ໄປຮອດ ໂຄລາດ ໃນເດືອນ 3 ແຮມ 3 ຄ່ຳ ປີ1826 ໃນເວລານັ້ນ ກອງທັບຂອງພະຍານະຄອນລາຊະລີມາ ໄດ້ຮັບຄຳສັ່ງໃຫ້ໄປຕີເມືອງ ຊຸຂັນ ຊຶ່ງພະຍາ ໄກສົງຄາມ ເຈົ້າເມືອງ ຊຸຂັນ ກັບທ້າວ ກິ່ງຫຼ້າ ນ້ອງຊາຍຜູ້ເປັນຫຼວງປະຫຼັດ ໄດ້ເຮັດກົນຕີກັນເອງ, ບາງກອກ ຈຶ່ງສັ່ງໃຫ້ ພະຍາ ລາຊະສີມາ ຍົກກອງທັບໄປ ປາບແຕ່ພໍກອງທັບ ລາຊະລີມາ ໄປຮອດກອງທັບ ພະຍາ ໄກສົງຄາມ ແລະ ທ້າວ ກິ່ງຫຼ້າ ສອງອ້າຍນ້ອງໄດ້ພ້ອມກັນຕີກັນຕັດຫຼັງ ເຮັດໃຫ້ກອງທັບພະລາຊະສີມາ ແຕກເຂົ້າສູ່ແດນຊະເໝນ. ຍ້ອນກອງທັບ ພະ ຍາ ນະຄອນລາຊະລີມາ ຍົກໄປຕີ ເມືອງ ຊຸຂັນ ຄືແນວນັ້ນ ກອງທັບ ເຈົ້າ ລາຊະວົງ ຈຶ່ງເຂົ້າຢຶດ ເອົານະຄອນລາຊະສີມາ ໄດ້ໂດຍງ່າຍ ແລ້ວໄປຕັ້ງທັບຢູ່ດ້ານນອກ ເມືອງພາກເໜືອ ເພື່ອຈະໄດ້ ລະວັງຮັກສາເຫດການໄດ້ງ່າຍ, ເຈົ້າ ລາຊະວົງ ໄດ້ສັ່ງໃຫ້ ເຈົ້າ ແສນ ສຸລິຍະພັນທິນ ຄຸມພົນ 1000 ຄົນ ໄປກະກຽມເສັ້ນທາງໃນດົງພະຍາໄຟ ເພື່ອໃຫ້ ກອງທັບຫຼວງຍົກທັບມາສະດວກແລ້ວ ໃຫ້ ເພັຍເມືອງຊາຍ ໄປເບີກເຂົ້າຈາກຄັງ ນະຄອນລາຊະສີມາ ມາລ້ຽງໄພ່ພົນ ເພື່ອກະກຽມລົງໄປ ສະລະບູລີ ແລ້ວສັ່ງໃຫ້ ເພັຍເມືອງຂວາ ຄຸມພົນ 2000 ຄົນ ຍົກກອງທັບລ່ວງໜ້າໄປ ສະລະບູລີກ່ອນ ແລະ ສັ່ງໃຫ້ ທ້າວ ມະນີ, ທ້າວ ພົມ ຄຸມກອງທັບ 2000 ຄົນ ຢູ່ຮັກສາຄ້າຍນອກເມືອງ ນະຄອນລາຊະສີມາ ຍ້ອນຄ້າຍນັ້ນຕັ້ງຂຶ້ນມາເພື່ອລໍຖ້າ ເຈົ້າ ອະນຸວົງ, ເຈົ້າ ລາຊະວົງ ເອງຄຸມພົນ 3800 ຄົນ ຍົກລົງໄປຕັ້ງທັບຢູ່ຕາແສງຂອນຂວາງ ແລ້ວເພັຍເມືອງຂວາ ກັບຊຽງໃຕ້ ແລະ ນາຍທັບ, ນາຍກອງທີ່ຍົກລົງໄປກ່ອນນັ້ນ ຈຶ່ງພາພະຍາ ສຸລາລາຊົນວົງ ເຈົ້າເມືອງ ສຸລະບູລີ ພ້ອມດ້ວຍຫຼວງປະລັດ, ກອງຄຳ, ກອງລົງ, ກອງຊຽງ... ເຂົ້າ ໄປພົບເຈົ້າ ລາຊະວົງ ແລະ ເພິ່ນ ເອງ ກໍໄດ້ສັ່ງໃຫ້ພາກສ່ວນເຫລົ່ານີ້ເປັນຜູ້ນຳຄອບຄົວລາວ ເມືອງ ສະລະບູລີ ອົບພະຍົບກັບຄືນວຽງຈັນ ບ້ານເກົ່າຂອງຕົນ.

ກອງທັບເຈົ້າ ອະນຸວົງ ແລະ ເຈົ້າ ສຸດທິສານ ໄດ້ຍົກທັບໄປຮອດ ນະຄອນລາຊະສີມາໃນ ເດືອນ 3 ລາວ ແຮມ 6 ຄ່ຳ ເວລາບ່າຍ 3 ໂມງ, ກອງທັບ ເຈົ້າ ອະນຸວົງ ໄດ້ເຂົ້າພັກໃນຄ້າຍທີ່ ເຈົ້າ ລາຊະວົງ ເຮັດໄວ້ນັ້ນຕໍ່ມາ ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ນາຍທັບນາຍກອງທ້ຽປວ ຟ້າວພາທະຫານ ໄປຕັດໄມ້ມາຕັ້ງຄ້າຍໃຫ່ຍຢູ່ທີ່ທົ່ງທະເລ ດ້ານຕາເວັນອອກ ຂອງເມືອງ ລາຊະສີມາ, ໄດ້ ຕັ້ງຄ້າຍ ໃຫ່ຍ 7 ຄ້າຍ ມີທະຫານ ທ້ຽໝົດ 20.000 ຄົນ.

- ການຕໍ່ສູ້ ຂອງກອງທັບລາວລ້ານຊ້າງ ຕ້ານກອງທັບສະຫຍາມ.

ພວກສະຫຍາມ ໄດ້ຮູ້ຂ່າວການເຄື່ອນທັບຂອງກອງທັບລາວ ແຕ່ທ້າຍປີ 1825 ຄືພາຍຫຼັງທີ່ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ເຈົ້າ ອຸປະຣາດ ຂັບໄລ່ພວກສະຫຍາມອອກຈາກ ເມືອງ ກາລະສິນ,

ຮ້ອຍເອັດ, ຂອນແກ່ນ, ຊົນນະບົດ. ໂດຍເລີ່ມເຂົ້າໄປຕີ ເມືອງ ກາລະສິນ ແລ້ວຕິດຕາມຂັບໄລ່ ພວກສະຫຍາມ ໃນເມືອງອື່ນໆ, ສ່ວນພວກທີ່ຍັງເຫລືອ ກໍໄດ້ລົງໄປລາຍງາມໃຫ້ບາງກອກຮູ້ວ່າ " ວຽງຈັນ ໄດ້ລຸກຮື້ຂຶ້ນແລ້ວ ແລະ ທາງບາງກອກ ກໍເລີ່ມຈັດກອງທັບຂຶ້ນມາຮຸກຮານລາວ, ພວກເຂົາຍັງບໍ່ທັນຮູ້ເວລາໃດ ກອງທັບຫຼວງລາວຈະຍົກໄປ, ພວກເຂົາຈຶ່ງໄດ້ສົ່ງຄົນອອກໄປສືບຂ່າວ ເປັນຫຼາຍສາຍ, ຫລາຍທາງ ເພື່ອຮູ້ລາຍລະອຽດສະພາບການເຄື່ອນທັບຂອງກອງທັບລາວ ".

ເມື່ອຮູ້ຂ່າວຈາກຫຼາຍທາງວ່າ " ເຈົ້າອະນຸວົງລຸກຮື້ຂຶ້ນ " ເຈົ້າຊີວິດສະຫຍາມ ຈຶ່ງສັ່ງໃຫ້ພະ ອິນທອນເທບ ເຈົ້າກົມຕຳຫຼວດໄປຫາເຮືອໄວຟ້າວຂຶ້ນໄປສືບລາຊະການທີ່ເມືອງ ສະລະບູລີ ໃຫ້ ໄດ້ຄວາມໂດຍໄວ, ໃຫ້ຫຼວງສຸພາມາຕາ ຜູ້ຖືໜັງສືມາຈາກກຸ່ງເກົ່ານັ້ນ ເປັນຜູ້ນຳພະຍາອິນທອນ ເທບຂຶ້ນມາ ເມືອງ ສາລະບູລີ ໃຫ້ພະອິນທອນເທບ ເຈົ້າກົມຕຳຫຼວດ ລູກເຈົ້ານະຄອນລາຊະສີ ມາ (ທອງອິນ) ກັບພະຍາ ລາຊະເສນາ ເຈົ້າບັນຊີກົມມະຫາດໄທ ຄຸມຄົນ 60 ຄົນ ຟ້າວຂຶ້ນມາ ສະລະບູລີ ແລ້ວຂຶ້ນມາທາງປາຈີນບູລີ ແລ້ວມາໂຄລາດ, ໃຫ້ພະຍາ ພະທະລີໄທ ເຈົ້າກົມຕຳ ຫຼວດທັງກົມຫຼວງເສນາ ຄຸມຄົນ 50 ຄົນ ເດີນບົກຂຶ້ນມາທາງປາຈີນບູລີ ແລະ ເມືອງ ກະບິນບູລີ, ໃຫ້ພະຍາລາຊະວັງສັນ ຄຸມນາຍຊ່າງ 400 ຄົນ ໄປຈັດແຈງສ້ອມແປງ ເຮືອລົບເຮືອໄລ່ ກຽມຍົກ ທັບຂຶ້ນມາ.

ການອົບພະຍົບຊາວລາວຢູ່ເມືອງ ໂຄລາດ ມາວຽງຈັນ ແລະ ປ່ອຍໃຫ້ພະຍາສຸລິຍະພັກດີ ລົງໄປບາງກອກ. ຫຼັງຈາກຕັ້ງຄ້າຍແລ້ວ ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ພະຍາຍົກກະບັດເມືອງ ໂຄລາດ ໄປພົບຕົນທີ່ຄ້າຍແລ້ວສັ່ງວ່າ: ເຈົ້າພະຍາ ນະຄອນລາຊະສີມາ ປະພຶດຊົ່ວເປັນພານສັນດານ ບຽດບຽນໄພ່ພົນລະເມືອງ ໃຫ້ໄດ້ຮັບຄວາມທຸກຮ້ອນມາດົນນານແລ້ວ. ເຮົາມາທາງນີ້ມີຄົນມາ ຮ້ອງທຸກຢູ່ບໍ່ໄດ້ຂາດ ດຽວນີ້ໄດ້ອົບພະຍົບຄອບຄົວເມືອ ນະຄອນລາດຊະສີມາ ຂຶ້ນໄປວຽງຈັນ ໃຫ້ ກະກຽມພາຍໃນກຳນົດ 4 ວັນ ແລ້ວຂຶ້ນໄປຢ່າງຮີບດ່ວນ.

ພາຍຫຼັງ ອົບພະຍົບຄອບຄົວຈາກ ນະຄອນລາດຊະສີມາ ໝົດແລ້ວ ໃນຕົ້ນເດືອນ 4 ເຈົ້າ ມະຫາອຸປະຣາດ ໄດ້ສົ່ງພວກກອງສັກເລກຈຳນວນຫຼາຍສິບຄົນ ທີ່ຖືກຈັບຢູ່ ເມືອງ ຍົມວະທອນ ແລະ ເມືອງອື່ນໆ ໂດຍມີ ພະຍາ ພັກດີ ເປັນຫົວໜ້າໃຫ້ ເຈົ້າ ອະນຸວົງ ຢູ່ນະຄອນລາດຊະສີມາ ຫລັງຈາກນັ້ນ ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ຄຸມຕົວໄວ້ທັງໝົດ, ໃຫ້ນຳແຕ່ຫົວໜ້າຄື ພະຍາ ສຸລິຍະພັກ ດີ ເຂົ້າພົບ, ແຕ່ຍ້ອນ ພະຍາ ສຸລິຍະພັກດີ ໄດ້ຍອມທຸກສິ່ງຢ່າງ ຈຶ່ງຂໍລົງໄປບາງກອກ ເພື່ອນຳ ເອົາຄອບຄົວຂຶ້ນມາ ແລະ ອົບພະຍົບໄປຢູ່ວຽງຈັນ. ພ້ອມດຽວກັນນີ້ ພະຍາ ສຸລິຍະພັກດີ ກໍໄດ້ ມອບ ພະອະນຸສິດພິທັກ (ບົວ) ຊຶ່ງເປັນນ້ອງຂອງ ພະຍາ ໄພທອນ (ນ້ອຍ), ສະມຸຫະນາຍົກ ແລະ ຄະນະໄວ້ເປັນຕົວປະກັນ ເຈົ້າ ອະນຸວົງ ພິຈາລະນາເຫັນວ່າ ໃນເວລານີ້ກອງທັບສະຫຍາມ

ຂອງກົມ ພະລາຊະວິງບໍ່ວອນ ກໍຍົກຂຶ້ນມາເຖິງສະລະບູລີແລ້ວ (ຍົກຂຶ້ນມາແຕ່ເດືອນ 4 ຂຶ້ນ 5 ຄ່ຳ) ຈຶ່ງຄວນປ່ອຍໃຫ້ ພະຍາ ສຸລິຍະພັກດີ ລົງໄປບາງກອກ ເພື່ອຖືໂອກາດນີ້ແຈ້ງໃຫ້ທາງ ບາງກອກ ຮູ້ວ່າ: ວຽງຈັນ ໄດ້ເປັນກະບົດ. ແຕ່ຍ້ອນຄົວເມືອງ ນະຄອນລາດຊະສີມາ ເມືອງ ສະລະບູລີ ແລະ ເມືອງອື່ນໆ ໄດ້ຮ້ອງທຸກວ່າ ເຈົ້າເມືອງທຳການກົດຂີ່ຂູດຮີດບຽດບຽນເປັນປະຈຳ ພວກເຂົາຈຶ່ງຕ້ອງການຈະຫລົບໄປຢູ່ວຽງຈັນ.

ພະຍານະຄອນລາຊະສີມາ ວາງແຜນຕໍ່ສູ້ກັບກອງທັບວຽງຈັນ, ພະຍານະຄອນລາຊະສີມາ ທີ່ຖືກຫຼອກໃຫ້ໄປຕີ ເມືອງ ຊຸຂັນ ນັ້ນ ໄດ້ຖືກກອງທັບ ພະຍາ ໄກສົງຄາມ ແລະ ທ້າວ ທ້ຽງ ຕຳຫຼວດ ເມືອງ ສັງຂະ ແລະ ເມືອງອື່ນໆ ຕີແຕກລົງໄປທາງຂະເໝນພຸ້ນ ຈຶ່ງຮູ້ວ່າຕົນພວມຖືກ ແຜນ ເຈົ້າ ອະນຸວົງ ທີ່ຍົກທັບມາຢຶດ ເມືອງ ໂຄລາດ, ດັ່ງນັ້ນ ພະຍານະຄອນລາຊະສີມາ ຈຶ່ງໄດ້ ແຕ່ງຕັ້ງໜ່ອຍມ້າໄວ ໃຫ້ຄົນລົງໄປລາຍງານຕໍ່ບາງກອກ ວ່າ: ເຈົ້າອະນຸວົງ ເປັນກະບົດໄດ້ຍົກ ກອງທັບໃຫຍ່ ລົງມາຢຶດເອົາຫົວເມືອງລາວ ໄດ້ຫຼາຍຫົວເມືອງແລ້ວ ແລະ ພວມເຂົ້າ ເມືອງ ໂຄ ລາດ, ຈຶ່ງຂໍໃຫ້ ບາງກອກ ຍົກກອງທັບຟ້າວຂຶ້ນມາຕີກອງທັບ ເຈົ້າ ອະນຸວົງ ສ່ວນກອງທັບເຈົ້າ ນະຄອນລາຊະສີມາ ຈະຍົກທັບຈາກ ເມືອງ ຊຸຂັນ ໄປຕີກອງທັບ ເຈົ້າ ອະນຸວົງ ເພື່ອລໍຖ້າກອງ ທັບຫລວງຈາກບາງກອກ.

ຫຼັງຈາກສັ່ງໜ່ອຍມ້າໄວ ລົງໄປລາຍງານຕໍ່ ບາງກອກ ແລ້ວ ເຈົ້າ ພະຍານະຄອນລາຊະສີ ມາ ຈຶ່ງເຕົ້າໂຮມກອງທັບຄົນໃໝ່ ແລ້ວຍົກກັບມາ ໂຄລາດ ສ່ວນກອງທັບ ພະຍາ ໄກສົງຄາມ ກໍ ໄດ້ຕິດຕາມລັດຕີກອງທັບທີ່ກັບມາ ໂຄລາດ ໄດ້ດ້ວຍການຊ່ວຍເຫຼືອຂອງ ເຈົ້າ ກະບິນບູລີ. ເມື່ອ ມາຮອດເຂດຂອງນະຄອນລາຊະສີມາ ແລ້ວຈຶ່ງເຫັນວ່າຄອບຄົວຂອງຕົນ ພວມຖືກອົບພະຍົບ ໄປວຽງຈັນ, ເຈົ້ານະຄອນລາຊະສີມາ ຈຶ່ງວາງແຜນຕໍ່ສູ້ກັບວຽງຈັນ ເພື່ອຍາດເອົາຄົນຕົນກັບຄືນ ມາ ໂດຍວາງແຜນໃຫ້ ພະຍາ ປະລັດ ເມືອງ ນະຄອນລາຊະສີມາ ເຂົ້າອ້ອນວອນ ເຈົ້າ ອະນຸວົງ; ຈາກນັ້ນ ເຈົ້າ ອະນຸວົງ ຈຶ່ງແຕ່ງໃຫ້ ພະຍາ ປະລັດ ແລະ ພະຍາ ພິມຍົກກະບັດ ເມືອງ ໂຄລາດ ເປັນອົງຄຸ້ມຄອງຄົວຊາວເມືອງ ໂຄລາດ ຂຶ້ນມາວຽງຈັນ ໂດຍມີທະຫານວຽງຈັນ ຄວບຄຸມຂຶ້ນມາ ນຳຈຳນວນໜຶ່ງ. ພະຍາສອງອົງນີ້ຈຶ່ງວາງແຜນຕີກອງທະຫານວຽງຈັນ ໂດຍພະຍາ ປະລັດ ຂີ່ມ້າ ກັບຄືນມາຫາ ເຈົ້າ ອະນຸວົງ ທີ່ຄ້າຍໃຫຍ່ເພື່ອຫລອກຂໍມີດ, ພ້າ ແລະ ປືນ ວ່າພໍຈະໄດ້ຫາເນື້ອ ກິນຕາມທາງ. ເຈົ້າ ອະນຸວົງ ກໍໄດ້ອະນຸຍາດໃຫ້ຈຳນວນໜ້ອຍໜຶ່ງ. ເມື່ອພວກຄົວ ເມືອງ ໂຄ ລາດ ເດີນທາງມາເຖິງ ທົ່ງສຳລິດ ກໍຂໍພັກເຊົາຢູ່ທີ່ນັ້ນຊົ່ວຄາວ ໂດຍອ້າງວ່າມີຄວາມອິດເມື່ອຍ ຫຼາຍ ແລ້ວ ພະຍາ ປະລັດ ພະຍາ ພິມຍົກກະບັດ ແລະ ພະຍາ ນະລົງສົງຄາມ ກໍຫາທາງຫຼອກ ພວກທະຫານວຽງຈັນ ໃຫ້ຫລົງທິດ ເພື່ອໃຫ້ກອງທັບ ນະຄອນລາຊະສີມາ ທີ່ລີ້ຢູ່ປ່າເຂົ້າຕີຍາດ

ເອົາຄົວໄດ້ໂດຍງ່າຍ. ພໍເດີກສະຫງັດກອງທັບຂອງ ພະຍາມະຄອນລາຊະສີມາ ທີ່ດັກສະກັດຢູ່ ກໍເຂົ້າມາຕີທະຫານຂອງ ເຈົ້າ ອະນຸວົງ ແຕກ ເມື່ອຢຶດເອົາຄົວໄດ້ແລ້ວ ພະຍາມະຄອນລາຊະສີ ມາ, ພະຍາ ພິມຍົກກະບັດ, ພະຍາ ນະລິງສິງຄາມ ກໍພາກັນຈັດແຈງຕັ້ງຄ້າຍຂຶ້ນ ເພື່ອລີ້ລັດຈັບ ກອງທັບຂອງ ເຈົ້າ ອະນຸວົງ ທີ່ມາຕີເອົາຄອບຄົວ. ສ່ວນພວກນາຍຄຸມທີ່ໜີມາໄດ້ ກໍພາກັນມາ ລາຍງານ ຕໍ່ ເຈົ້າ ອະນຸວົງ ແລ້ວເຈົ້າ ອະນຸວົງ ຈຶ່ງແຕ່ງຕັ້ງໃຫ້ຕຳໜວດໜ້າ 50 ຄົນ ຂີ່ມ້າຂຶ້ນໄປ ເບິ່ງ ທະ ຫານຂອງຕົນ ແຕ່ຖືກທະຫານຂອງນະຄອນລາຊະສີມາ ນຳໂດຍໜ່ວງພິທັກໂຍທາ ຍິງ ຕາຍໜ່າຍຄົນ ພວກຕຳໜວດຈຶ່ງກັບຄົນມາລາຍງານຕໍ່ ເຈົ້າ ອະນຸວົງ ວ່າກອງທັບ ນະຄອນລາຊະ ສີມາ ໄດ້ເຂົ້າສະກັດຕີຄົວຄົນໄດ້ ແລ້ວຕັ້ງທັບຢູ່ຕໍ່ໜ້າ ທົ່ງສຳລິດ ຊຶ່ງເປັນດ້ານຫຼັງຂອງ ເຈົ້າ ອະ ນຸວົງ; ເຈົ້າ ອະນຸວົງ ແຕ່ງຕັ້ງໃຫ້ ເຈົ້າ ສຸດທິສານ, ເຈົ້າ ກຳພ້າ ແລະ ເຈົ້າ ປານ ຄຸມທະຫານ 3600 ຄົນ ມາຕີກອງທັບຂອງ ເຈົ້ານະຄອນລາຊະສີມາ ໂດຍເຈົ້າ ປານ ຄຸມທະຫານ ມ້າ 400 ຄົນ ຍົກທັບລ່ວງໜ້າໄປກ່ອນແລ້ວ, ເຈົ້າ ສຸດທິສານ, ເຈົ້າ ກຳພ້າ ຄຸມທະຫານ 3200 ຄົນ ຍົກ ທັບມາຕາມຫຼັງ.

ຝ່າຍນະຄອນລາຊະສີມາ, ພະຍາປະລັດ, ພະຍາຍົກກະບັດ ແລະ ພະຍາ ນະລິງສິງຄາມ ຊຶ່ງໄດ້ຈັດຕັ້ງກອງທັບອອກຕໍ່ສູ້ມີກຳລັງພົນ ແລະ ອາວຸດເໜືອກວ່າກອງທັບລາວ ທະຫານລາວ ຖືກຍິງຕາຍ 300 - 400 ຄົນ. ເມື່ອເຈົ້າ ສຸດທິສານ ເຫັນວ່າກອງທັບ ພະຍານະຄອນ ລາຊະສີ ມາເໜືອກວ່າ ໂດຍສະເພາະ ມີອາວຸດດີ ແລະ ທະຫານລາວ ກໍຕາຍໜ່າຍ ຈຶ່ງຖອນທັບມາຫາ ເຈົ້າ ອະນຸວົງ ລາຍງານເຫດການໃຫ້ຮູ້ທຸກສິ່ງຢ່າງ. ໃນເວລາດຽວກັນນັ້ນ, ກອງທັບຂອງເຈົ້າລາ ຊະວົງ ກໍອົບພະຍົບຄົວ ເມືອງ ສະລະບູລີ ມາເຖິງ ນະຄອນລາຊະສີມາ ແລ້ວລາຍງານໃຫ້ ເຈົ້າ ອະນຸວົງ ຮູ້ວ່າ: ອົບພະຍົບເອົາຄົວເຮືອນສະຫຍາມ ໄດ້ 110 ຄົນ ຈັບໄດ້ 220 ຄົວ ລາວໄດ້ 10.000 ຄົນ ເຈົ້າ ລາຊະວົງ ໄດ້ລາຍງານວ່າໄດ້ຍົກອອກຈາກ ເມືອງ ສະລະບູລີ ແຕ່ ວັນອັງ ຄານ ເດືອນ 3 ແຮມ 9 ຄ่ຳ ປີ 1826.

ພາຍຫຼັງທີ່ເຈົ້າ ອະນຸວົງ ຍົກທັບໄປຮອດໂຄລາດແລ້ວ ເພິ່ນໄດ້ຈັດກຽມການຕໍ່ສູ້ປ້ອງກັນ ແຜ່ນດິນລາວ ໂດຍສ້າງຕັ້ງຄ້າຍ ແລະ ປ້ອມຢ່າງແໜ້ນໜາແຂງແຮງ, ສ້າງເລົ້າເຂົ້າໃຫຍ່ໄວ້ສະ ສົມສະບຽງອາຫານ ເພື່ອກຽມເຮັດສົງຄາມຍາວນານ. ແຕ່ຕໍ່ມາ, ເມື່ອເຈົ້າ ອະນຸວົງ ຮູ້ວ່າກອງ ທັບ ບາງກອກ ຍົກທັບມາຫຼາຍແນວນັ້ນ ເພິ່ນຈຶ່ງປຶກສາກັບເຈົ້າ ສຸດທິສານ, ເຈົ້າ ລາຊະວົງ ແລະ ທ້າວແສນເພຍກວານ ແມ່ທັບນາຍກອງທ້າວປວງວ່າ: “ ເຮົາຈັດຕັ້ງທັບສູ້ກັບ ບາງກອກ ຢູ່ໂຄລາດນີ້ ບໍ່ໄດ້ ຍ້ອນທັບ ບາງກອກ ພວມຍົກຂຶ້ນມາຫຼາຍທາງຄື: ທາງສະລະບູລີ, ນະຄອນນາຍົກ ແລະ ທາງອື່ນໆ ເພື່ອສຸມໃສ່ຕີ ເມືອງ ໂຄລາດ ຄືນ ໂດຍສະເພາະເວລານີ້ ກອງທັບພະຍານະຄອນລາ

ຊະສົມາ ພວມຕັ້ງຢູ່ທົ່ງສຳລິດຖ້າຢູ່ໂຄລາດ ນີ້ຢ້ານຈະເປັນເສິກຊະນາບ ຈຳເປັນຕ້ອງແຍກໄພ່ພົນໄປຕໍ່ສູ້ຫຼາຍທາງ ເພື່ອໃຫ້ກອງທັບສະຫຍາມແຕກກຳລັງໄປຕິແຕ່ລະບ່ອນແລ້ວ ຝ່າຍເຮົາກໍຕີສະຫຍາມ ຢູ່ທີ່ ໜອງບົວລຳພູ ເຫັນຈະດີກວ່າ ເມືອງ ໂຄລາດ ".

ຫຼັງຈາກປຶກສາກັນຮຽບຮ້ອຍແລ້ວ ເຈົ້າ ອະນຸວົງ ຈຶ່ງສັ່ງໃຫ້ກອງທັບເຈົ້າ ລາຊະວົງ ຍົກຂຶ້ນໄປທາງ ເມືອງ ຫຼົ່ມສັກ ເພື່ອອົບພະຍົບເອົາຄົນຕາມເສັ້ນທາງ ຄື: ເມືອງ ບົວຊຸມ, ໄຊບາດານ, ເພັດສະບຸນ... ແລ້ວຍົກທັບຂຶ້ນໄປຕັ້ງຄ້າຍຢູ່ ເມືອງ ຫຼົ່ມສັກ. ຈາກນັ້ນ ໄດ້ສັ່ງ ພະສຸລິຍະວົງສາ ເຈົ້າເມືອງ ຫຼົ່ມສັກ ອອກມາພົບ, ຫຼັງຈາກປຶກສາກັບເຈົ້າເມືອງ ຫຼົ່ມສັກ ແລ້ວເຈົ້າ ລາຊະວົງ ກໍ ຍົກທັບເຂົ້າໄປຕັ້ງຢູ່ໃນເມືອງ ແລະ ຈັດແຈງສະບຽງອາຫານ ທັງແຕ່ງຄົນມາສົ່ງໃຫ້ກອງທັບ ເຈົ້າ ອະນຸວົງ ທີ່ພວມຍ້າຍມາໜອງບົວລຳພູ. ເຈົ້າ ອະນຸວົງ ໃຫ້ກອງທັບເຈົ້າ ສຸດທິສານ ໄປຕັ້ງໝັ້ນຢູ່ ເມືອງ ພູຂຽວ ແລ້ວໃຊ້ນາຍທະຫານກອງໜຶ່ງໄປຮຽກເອົາຕົວ ເຈົ້າເມືອງ ພູຂຽວ ອອກມາພົບ. ເມື່ອເຈົ້າເມືອງ ພູຂຽວ ບ່ຍອມອອກມາພົບ, ເຈົ້າ ສຸດທິສານ ຈຶ່ງສັ່ງໃຫ້ນາຍທັບນາຍກອງຄຸມທະຫານ 1000 ກວ່າຄົນ ເຂົ້າຕີເມືອງ ແລະ ໄດ້ຈັບເອົາທ້າວ ນາກ ຜູ້ເປັນເຈົ້າເມືອງມາມອບໃຫ້ ເຈົ້າ ສຸດທິສານ. ເຈົ້າ ສຸດທິສານ ໄດ້ສັ່ງໃຫ້ປະຫານຊີວິດຜູ້ກ່ຽວ ແລະ ອົບພະຍົບຊາວ ເມືອງ ພູຂຽວ ມາວຽງຈັນ. ຕໍ່ຈາກນັ້ນ ກອງທັບເພິ່ນກໍໄດ້ຕັ້ງໝັ້ນຢູ່ ເມືອງ ພູຂຽວ ຕໍ່ໄປ.

ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ທະຫານກຽມຍ້າຍກອງທັບໄປ ໜອງບົວລຳພູ ໂດຍໃຫ້ເຫຼືອໄວ້ ໂຄລາດ ເຄິ່ງໜຶ່ງເພື່ອໃຫ້ເຝົ້າຍາມເລົ້າເຂົ້າ ແລະ ຄ້າຍທີ່ຕັ້ງຂຶ້ນນັ້ນເສຍກ່ອນ, ແລ້ວຈຶ່ງໃຫ້ໄປ ມ້າງ ກຳແພງໂຄລາດ ເສຍ 2 ດ້ານ ເພື່ອບ່ໃຫ້ສັດຕູເຂົ້າມາອາໄສໄດ້. ຫຼັງຈາກສັ່ງການແລ້ວ ຈຶ່ງ ຍົກກອງທັບໃຫ່ຍ ຈາກໂຄລາດ ໄປຕັ້ງຢູ່ ໜອງບົວລຳພູ ແລ້ວເຈົ້າ ອະນຸວົງ ກໍໄດ້ນຳພາຈັດຕັ້ງ ຄ້າຍໄວ້ສູ້ກັບສະຫຍາມຫລາຍບ່ອນ ໂດຍຕັ້ງຄ້າຍໃຫ່ຍຢູ່ ໜອງບົວລຳພູ ແລ້ວໃຫ້ພະຍາ ນະ ລິນ ຄຸມທະຫານ 3000 ຄົນ ຢູ່ປະຈຳຄ້າຍນັ້ນ. ສ່ວນເຈົ້າ ອະນຸວົງ ໄດ້ຍົກກຳລັງໄປຕັ້ງຄ້າຍຢູ່ ຮ່ອມ ພູເຂົ້າສານ ບ່ອນເສັ້ນທາງໄປວຽງຈັນ. ເພິ່ນກໍມອບໃຫ້ ພະຍາ ສຸໂພກັບຊານິນ ເປັນນາຍ ທັບ ຄຸມທະຫານ 20.000 ຄົນ ປະຈຳຢູ່ຮ່ອມ ພູເຂົ້າສານນີ້ ສ່ວນເພິ່ນເອງຕັ້ງຄ້າຍໃຫ່ຍອີກຄ້າຍ ໜຶ່ງເທິງພູເຂົ້າສານ. ນອກຈາກນັ້ນ ເພິ່ນກໍມອບໃຫ້ ພະຍາ ຊຽງສາ ເປັນແມ່ທັບ ຄຸມທະຫານ 5000 ຄົນ ໄປຕັ້ງຄ້າຍຢູ່ ບ້ານ ສະໜົມ, ໃຫ້ພະຍາ ກອງຄຳ ຄຸມທະຫານ 4000 ຄົນ ໄປຕັ້ງຄ້າຍ ຢູ່ຊ່ອງງົບແຕກ; ສ່ວນກອງທັບຂອງ ເຈົ້າ ອຸປະຣາດ ທີ່ຕັ້ງຢູ່ ເມືອງ ຍະໂສທອນນັ້ນ ເພິ່ນໄດ້ມີ ໜັງສືສັ່ງໃຫ້ຍົກກອງທັບໄປຕັ້ງຮັກສາຢູ່ຕົ້ນທາງ ເມືອງ ສຸວັນນະພູມ ຊຶ່ງເປັນທາງທີ່ສັດຕູຈະມາ ຫາກະບົນ ແລະ ໃຫ້ພະຍາ ສຸຂະ ຄຸມທັບຊ້າງ ແລະ ຄວາຍຕ່າງເຄື່ອງສົ່ງສະບຽງອາຫານ ແລະ ກະສູນປືນໄປແຈກຢາຍໃຫ້ທຸກໆ ກອງທັບ.

ໃນເວລາທີ່ກອງທັບລາວພວມຕັ້ງຄ້າຍຢູ່ ໜອງບົວລຳພູ ນັ້ນກອງທັບ ພະຍານະຄອນລາ ຊະສີມາ ໄດ້ມາລີ້ຢູ່ ບ້ານ ລຳພີ ໃກ້ໜອງບົວລຳພູ ເພື່ອສືບຂ່າວການເຄື່ອນໄຫວ ຂອງກອງທັບ ລາວ ແລ້ວລາຍງານເລື່ອງທັງໝົດໄປໃຫ້ກອງທັບໃຫຍ່ສະຫຍາມ ທີ່ພວມເຄື່ອນທັບຂຶ້ນມານັ້ນຮູ້ ທຸກຢ່າງ.

ເມື່ອເຈົ້າ ອະນຸວົງ ໄດ້ຕັ້ງຄ້າຍ ແລະ ຈັດແມ່ທັບນາຍກອງ ເພື່ອຮັກສາດ່ານຢ່າງໝັ້ນຄົງ ແລ້ວເພີ່ນຈຶ່ງສັ່ງໃຫ້ທະຫານກອງສຸດທ້າຍຖອຍຈາກໂຄລາດ ໂດຍໄດ້ຈັດທັບໄປເພີ່ມຕື່ມໃຫ້ອີກ ເຖິງ 4000 ຄົນ ເພື່ອຍົກຍ້າຍເຄື່ອງຂອງ ໂດຍຈັດເປັນ 3 ທັບ ຄື: ໃຫ້ພະຍາ ລັດທິເດໂຊ ເປັນ ທັບໜ້າ, ໃຫ້ເຈົ້າ ໂອ ເປັນທັບຫຼວງ, ໃຫ້ພະຍາ ສີງຄາມວຽງໄຊ ເປັນທັບໜູນ ລວມຈຳນວນພົນ ທັງໝົດເປັນໝື່ນກວ່າຄົນ. ເວລາພວມຕັດໄມ້ຕັ້ງຄ້າຍຢູ່ນັ້ນ ກອງທັບນະຄອນລາຊະສີມາ ນຳ ໂດຍພະຍາ ນະລິງສີງຄາມ ຊຶ່ງຕັ້ງຄ້າຍຢູ່ກ່ອນນັ້ນແລ້ວ ໄດ້ບຸກໂຈມຕີກອງທັບລາວຢ່າງກະທັນ ຫັນ. ຕໍ່ສະພາບ ການດັ່ງກ່າວນັ້ນ ເຈົ້າ ໂອ ຈຶ່ງສັ່ງຖອນກອງທັບລາວ ໄປຕັ້ງຢູ່ບ້ານຕົນພູເຂົ້າ ນ້ຳ ພຸ ໄກຈາກບ້ານ ທົ່ງລຳພີ ທາງ 2 ມື້ 2 ຄືນ.

ພະຍາ ນະລິງສີງຄາມ ເອງ ກໍໄດ້ສັ່ງໃຫ້ຫລວງພິນອາສາ ຮີບຟ້າວນຳກອງມ້າໄປສືບຂ່າວ ລະອຽດຂອງກອງທັບລາວ ທີ່ຕັ້ງຄ້າຍຢູ່ຕົນພູເຂົ້າ ນ້ຳພຸນັ້ນ. ເມື່ອຮູ້ວ່າກອງທັບລາວຕັ້ງຄ້າຍເປັນ 3 ຄ້າຍ ແລະ ຮູ້ຈຸດທີ່ຕັ້ງແນ່ນອນແລ້ວ ແລະ ໂດຍໄດ້ຮັບກຳລັງເພີ່ມຈາກນະຄອນລາຊະສີມາ, ພວກເຂົາຈຶ່ງຍົກທັບໄປໝອນຕີກອງທັບລາວ ທີ່ພວມຕັ້ງຄ້າຍຢູ່ນັ້ນແຕກອີກ.

ເຈົ້າ ອະນຸວົງ ຮູ້ວ່າກອງທັບນະຄອນລາຊະສີມາ ຍົກທັບມາເພີ່ມ ແລະ ມາໃກ້ຄືແນວນັ້ນ ຈຶ່ງສັ່ງໃຫ້ ພະຍາ ນະລິນ ກຽມປ້ອງກັນ ໜອງບົວລຳພູ ຢ່າງແຂງແຮງ ແລະ ໃຫ້ທ້າວ ອິນທອນ ແລະ ສູນທອນ ຄຸມທະຫານ 2000 ຄົນ ໄປເພີ່ມຕື່ມອີກ ລວມເປັນ 5000 ຄົນ. ພ້ອມດຽວກັນ ນັ້ນເຈົ້າ ອະນຸວົງ ກໍໄດ້ຕັ້ງຄ້າຍຂຶ້ນອີກຢູ່ ທົ່ງສົ້ມປ່ອຍ ໂດຍມອບໃຫ້ພະຍາ ຊຽງຂວາ ເປັນນາຍ ທັບ ລວມມີທະຫານ ທັງໝົດ 5000 ຄົນ.

ເມື່ອເຈົ້າ ອະນຸວົງ ໄດ້ຈັດຕັ້ງຄ້າຍທີ່ ພູເຂົ້າສານ ສຳເລັດແລ້ວ ເພີ່ນຈຶ່ງໄດ້ຮຽກເອົາ ເຈົ້າ ສຸກທິສານ ມາຈາກ ພູຊຽວ ແລ້ວແຕ່ງຕັ້ງເພີ່ນເປັນແມ່ທັບໃຫຍ່ ບັນຊາທຸກທັບທຸກກອງ ທັງ 7 ຄ້າຍ ລວມທະຫານດ້ວຍກັນ 20.000 ຄົນ; ນອກຈາກນັ້ນ ເພີ່ນໄດ້ມອບໃຫ້ ພະຍາ ສຸໂພ ກັບ ຊານິນ ຊຸນນາງຜູ້ໃຫຍ່ຢູ່ຊ່ວຍ ເຈົ້າ ສຸດທິສານ ເປັນປີກຂວາ ແລະ ຊ້າຍ, ໃຫ້ພະຍາ ນະລິນ ຄຸມ ທັບທະຫານມ້າ 500 ຄົນ ເປັນກອງລະວັງເຫດ, ໃຫ້ພະຍາ ປະລິດຄະຊະກາດ ເປັນແມ່ກອງທັບ ຊ້າງ ຄຸມທະຫານຊ້າງ 400 ຄົນ ຢູ່ຊ່ວຍເຈົ້າ ສຸດທິສານ ເພື່ອຕ້ານກັບກອງທັບໃຫຍ່ສະຫຍາມ ທີ່ ພວມຂຶ້ນມາຮຸກຮານລາວ. ນອກນັ້ນ ເຈົ້າ ອະນຸວົງ ຍັງສັ່ງໃຫ້ກອງທັບທີ່ແຕກຈາກບ້ານ ຕົນພູນ້ຳ

ພຸນັ້ນ ຄຸມທະຫານ 5000 ຄົນ ແລ້ວຮີບຟ້າວໄປຕັ້ງຄ້າຍລັດທາງຢູ່ທີ່ງບົກຫວານ ຮີມຝັ່ງແມ່ນ້ຳ ຂອງ ທ່າຂ້າມກັບເມືອງວຽງຈັນ.

ເຈົ້າ ອະນຸວົງ ສັ່ງໃຫ້ແມ່ທັບ ພິມພິສານ ຄຸມທະຫານ 60 ຄົນ ຂົ້ນຂີ່ມ້າຖືໜັງສືໄປໃຫ້ ເຈົ້າ ໜໍ່ຄຳ ຜູ້ເປັນໜານທີ່ຖືກແຕ່ງຕັ້ງ ໃຫ້ຍົກທັບໄປຕີບ້ານນ້ອຍເມືອງໃຫຍ່ ທາງຝ່າຍເໜືອນັ້ນ ໃຫ້ຍົກທັບກັບມາຊ່ວຍ ພະຍາ ຊຽງຂວາ ເພື່ອຮັກສາຄ້າຍທີ່ງສົ້ມປ່ອຍ; ປະຕິບັດຕາມຄຳສັ່ງນັ້ນ ເຈົ້າ ໜໍ່ຄຳ ກໍໄດ້ຈັດແຈງການປ້ອງກັນດ່ານ, ເຂດທາງເມືອງວຽງຈັນ ທັງຊັ້ນນອກ ແລະ ໃນຢ່າງ ແໜ້ນໜາ.

- ສັກດິນາສະຫຍາມ ຈັດກອງທັບ ເພື່ອເຂົ້າບຸກຕີ ກອງທັບລາວ.

ເພື່ອຮັບໃຊ້ຈຸດປະສົງແພ່ອຳນາດໄປທາງຕາເວັນຕົກ ກໍຄືເພື່ອເອົາຊະນະພະມ້າ ໃຫ້ໄດ້ ພວກສັກດິນາສະຫຍາມ ຈຶ່ງທຸ່ມເທໃສ່ການຊື້ອາວຸດທັນສະໄໝ ຈາກພວກນາຍທຶນ ຕາເວັນຕົກ ທີ່ເຂົ້າມາຄ້າຂາຍຢູ່ ທ່າເຮືອບາງກອກ ອັນພາໃຫ້ພວກເຂົາ ສາມາດສະສົມອາວຸດທັນສະໄໝ ຢ່າງຫລວງຫລາຍ. ບໍ່ພຽງແຕ່ເທົ່ານັ້ນ ພວກເຂົາຍັງໄດ້ຈ້າງພວກ ເອີຣົບ ມາເປັນນາຍທະຫານ, ເປັນຄູຝຶກດ້ານຍຸດທະວິທີສະໄໝໃໝ່ ແລະ ການໃຊ້ອາວຸດທັນສະໄໝ.

ໃນປີ 1825 ເຈົ້າຊີວິດສະຫຍາມ ເມື່ອຮູ້ຂ່າວວ່າເສິກກັບລາວຈະເກີດຂຶ້ນ ກໍໄດ້ກະກຽມ ກອງທັບຕົນໄວ້ພ້ອມ ແລະ ທັງໄດ້ເກນກອງທັບເມືອງຂຶ້ນຕົນໃຫ້ມາຊ່ວຍ. ນອກນັ້ນພວກເຂົາຍັງ ໄດ້ໃຫ້ ພະຍາ ຍົມມະລາດ ຖອດເອົານັກໂທດສະເລີຍເສິກ ພະມ້າທະວຽງ ທີ່ເກ່ັງກ້າ ຈຳນວນ 500 ຄົນ ອອກຈາກຄຸກ ແລ້ວຈ້າງໃຫ້ຂຶ້ນມາຊ່ວຍພວກ ນະຄອນລາຊະສີມາ ຕີກອງທັບລາວ.

ຫລັງຈາກນັ້ນ ກອງທັບສະຫຍາມ ກໍ່ໄດ້ເຄ່ືອນທັບເປັນຫລາຍກອງ ຂຶ້ນມາກຸງເກ່ົາອາຍຸດ ທະຍາ ພາຍໃຕ້ການບັນຊາຂອງກົມ ພະລາຊະວັງບວອນ ຄືໃຫ້ພະຍາ ພູທອນ ຄຸມທະຫານ 58.000 ຄົນ ເປັນກອງລຳລ່ຽງ ພະຮຸລະເສນາ ກັບພະຍາ ໄພໂນລິດ ຄຸມຄົນ 500 ຄົນ ຕັ້ງຄ້າຍ ຢູ່ບ້ານ ບໍໂພງ ແຂວງ ກຸງເກ່ົາ, ພະຍາ ອັກຄະມະຫາເສນາ (ນ້ອຍ) ເປັນແມ່ທັບບົກຄຸມທະຫານ 1.000 ຄົນ ມາຕັ້ງຄ້າຍຢູ່ ບ້ານ ພະຊາດ ຈັບຊ້າງ ແຂວງ ກຸງເກ່ົາ; ກົມໝື່ນເດດອະດິສອນ ຄຸມ ຄົນ 500 ຄົນ ມາຕັ້ງຄ້າຍຢູ່ຕາແສງ ນອກປາຈີນບູລີ; ພະສີຫະລາດເດໂຊ ຄຸມທະຫານ 500 ຄົນ ມາຕັ້ງຄ້າຍຢູ່ ເມືອງ ກະບິນບູລີ, ພະຍາ ພິໄຊວາລີ (ໂຕ) ຄຸມທະຫານ 500 ຄົນ ມາຕັ້ງ ຄ້າຍຢູ່ທີ່ທ່ີງສາມແສນ; ພະຍາ ເດໂຊທ້າຍນ້ຳ ຄຸມພົນ 500 ຄົນ ມາຕັ້ງຄ້າຍຢູ່ທີ່ຫ້ວຍໍາໂພງ; ເຈົ້າ ສີລິ ຄຸມພົນ 500 ຄົນ ມາຕັ້ງຄ້າຍຢູ່ສະໜາມກະບ ີ, ພະຍາ ນະຄອນອິນທະລະລາມັນ ກັບ ພະຍາ ກຽດລາມັນ ຄຸມທະຫານມອນ 300 ຄົນ ມາຕັ້ງຄ້າຍຢູ່ທ່ີງພະຂະໂນງ, ພະຍາ ມະຫາອັກ ຄະນິກອນ ແມ່ທັບທະຫານປືນໃຫຍ່ ຄຸມພົນທະຫານປືນໃຫຍ່ 500 ຄົນ ໄປເພ່ີມຕ ີ່ມຢູ່ປາກນ້ຳ

ເມືອງ ສະໝຸດປາກາມ; ພະຍາ ຍົມມະລາດ ເປັນຜູ້ຈັດກຽມປ້ອງກັນ ເມືອງ ບາງກອກ ແລະ ໃຫ້ ພະຍານະຄອນສີທຳມະລາດ ເກນທະຫານຈາກຫົວເມືອງພາກໃຕ້ ໃຫ້ໄດ້ 10.000 ຄົນ ມາ ຊ່ວຍປ້ອງກັນບາງກອກ. ເຈົ້າຊີວິດສະຫຍາມ ຍັງສັ່ງໃຫ້ເຄື່ອນທັບໃຫຍ່ 2 ທັບ ຄື:

ກອງທີ 1: ໃຫ້ຍົກຂຶ້ນໄປຕີວຽງຈັນ ໂດຍແມ່ນກົມ ພະລາຊະວັງບໍ່ບອນ ເປັນແມ່ທັບ ຄຸມ ພົນ 10.000 ຄົນ ມາຕັ້ງທັບຢູ່ກຸງເກົ່າ ເພື່ອລໍຖ້າບັນດາກອງທັບຫົວເມືອງຝ່າຍເໜືອ ມາພ້ອມ ພ້ຽງກັນ. ພໍຮອດ ວັນເສົາ ເດືອນ 4 ຂຶ້ນ 15 ຄ່ຳ ປີ ຈໍ ອັດຖະສິກ (1826) ກອງທັບໃຫຍ່ ຈຶ່ງ ເຄື່ອນທັບຈາກກຸງເກົ່າ ມາສະລະບູລີ ໂດຍທາງເຮືອໃຊ້ເວລາ 3 ວັນ ກໍເຖິງເມືອງ ສະລະບູລີ ຈຶ່ງ ມີກອງໜ້າຄອຍຕ້ອນຮັບຢູ່ເມື່ອເວລາມາຮອດແລ້ວ ກົມພະລາຊະວັງບໍ່ວອນ ຈຶ່ງຈັດແບ່ງກອງ ທັບໃຫຍ່ ເພື່ອມາທາງບົກ ຄື: ໃຫ້ພະຍາ ຈ່າແສນຍາກອນ, ພະຍາ ກາລະໂຫມລາຊະເສນາ, ພະຍາ ນະລານຸກິດມົນຕີ, ພະຍາ ນະລິງຄະມີໄຊ 4 ຄົນ ນີ້ເປັນແມ່ທັບໜ້າທີ່ໜຶ່ງ; ກົມໝື່ນນະ ເລດໂຍທີ, ກົມໝື່ນເສນີບໍລິສັກ 2 ຄົນນີ້ ເປັນແມ່ທັບໜ້າທີ່ 2; ໃນກອງທັບໃຫຍ່ນັ້ນມີ: ພະອິ່ງ ເຈົ້າສັງຖັດ ເປັນນາຍກອງປີກຊ້າຍ, ເຈົ້າ ສຸລິຍະວົງ ເປັນກອງປີກຂວາ, ກົມໝື່ນລາມະອິດສະ ເດດ ເປັນຍົກກະປົດທັບ, ກົມໝື່ນທິເດດບໍ່ວອນ ເປັນຈຳເລທັບ, ກົມໝື່ນເທບພັກດີ ເປັນກອງ ກຽກກາຍ (ກອງສະບຽງອາຫານ) ພະນະເລນທອນ ເປັນນາຍກອງທັບຫລັງ, ເຈົ້າສະຫວ່າງ ພະຍາ ກະເສດຮັກສາ, ພະຍາ ສາລະສິດທິລົງ ເປັນນາຍກອງໜູນ ເມື່ອຈັດທັບຮຽບຮ້ອຍແລ້ວ ກອງທັບໃຫຍ່ຈຶ່ງຂຶ້ນມາທາງດົງພະຍາໄຟ.

ກອງທີ 2: ໃຫ້ຍົກໄປທາງທິດ ຕາເວັນອອກ ໄປຕີ ເມືອງ ຈຳປາສັກ ແລ້ວຈຶ່ງໄປພົບກັບ ກອງທັບໃຫຍ່ທີ່ໜຶ່ງທີ່ວຽງຈັນ. ໃຫ້ກົມໝື່ນ ສຸລິນທະລະສັກ ເປັນຈອມທັບ ຕັ້ງທັບຢູ່ທີ່ ເມືອງ ປາ ຈີນບູລີ ໂດຍມີ ພະຍາ ລາຊະສຸພາດີ ເປັນກອງໜ້າທີ່ໜຶ່ງ, ເຈົ້າພະຍາຄັງ ເປັນໜ້າທີ່ສອງ, ກົມ ໝື່ນສຸລິນທະລະ ເປັນກອງຫລວງ, ກົມໝື່ນພິພິດພູເບດ ເປັນປີກຊ້າຍ, ກົມໝື່ນພິທັກເທເວດ ເປັນປີກຂວາ, ໃຫ້ພະຍາ ລາຊະນິກຸນ, ພະຍາ ລາມກຳແພງ, ພະຍາ ລະຊາວົງເມືອງ, ພະຍາ ຈັນທະບູລີ ຄຸມທັບຫົວເມືອງຝ່ັງທະເລ ຕາເວັນອອກ 5.000 ຄົນ ຄື: ເມືອງ ຈັນທະບູລີ, ເມືອງ ລະຍອງ, ເມືອງ ຕາດ ໃຫ້ຂຶ້ນໄປທາງ ເມືອງ ພະຕະບອງ, ສຸລິນ, ສັງຂະ, ທ້າວເກນເອົາຊະເໜນ ໃຫ້ໄດ້ 5.000 ຄົນ ໄປຕີເຈົ້າ ລາຊະບຸດ ທີ່ເມືອງ ຈຳປາສັກ ແລະ ໃຫ້ເປັນທັບຊະໜາບຂອງ ກອງທັບ ພະລາຊະສຸພາວະດີ (ສິງ) ທີ່ໄປທາງທິດຕາເວັນອອກ.

ໃນການເຄື່ອນທັບຂອງສະຫຍາມ ທັ້ງໝົດນັ້ນ ໄດ້ມີປະຊາຊົນ ແລະ ກອງທລອນລາວ ທລອນຕີພວກເຂົາໄດ້ຢູ່ຫລາຍໆບ່ອນ, ອັນໄດ້ເຮັດໃຫ້ພວກເຂົາ ປະສົບຄວາມລຳບາກຫລາຍ ປະການ ແລະ ນອກຈາກນັ້ນ ກໍໄດ້ເກີດພະຍາດໄຂ້ປ່ວຍຂຶ້ນ ໃນກອງທັບຫລວງຂອງພວກເຂົາ,

ເຮັດໃຫ້ພວກເຂົາຕ້ອງເສຍໄພ່ພົນຢ່າງຫລວງຫລາຍ.

ດັ່ງນັ້ນ ພວກສະຫຍາມ ຈຶ່ງຕ້ອງໄດ້ໃຊ້ເວລາເປັນປີປາຍ ເພື່ອຊອກຫາອາວຸດທັນສະໄໝ ມາຕື່ມໃຫ້ກອງທັບຂອງຕົນ ແລະ ເພື່ອຍາດເອົາທ່າເໜືອກ່ວາດ້ານອາວຸດທັນສະໄໝ ຈົນຮອດ ເດືອນ 5 ແຮມ ປີ 1827 ກອງທັບຫລວງຂອງສະຫຍາມກົມ ພະລາະຊະວັງບໍ່ວອນ ຈຶ່ງສາມາດ ຍົກທັບຂ້າມດົງ ພະຍາໄຟ ໄດ້ ແລະ ມາຕັ້ງທັບຢູ່ ເມືອງ ໂຄລາດ. ຫລັງຈາກນັ້ນ ກົມລະຊະວັງບໍ່ ວອນ ຈຶ່ງສັ່ງໃຫ້ເຈົ້າເມືອງ ໂຄລາດ ຈັດການປົວແປງເມືອງຄືນໃໝ່ ແລະ ສັ່ງໃຫ້ພະຍາ ລະຊະສຸ ພາວະດີ ຄຸມພົນ 8.000 ຄົນ ໄປຕີເມືອງ ຈຳປາສັກ.

ບັນດາບັ້ນຮົບຕ່າງໆ ກອງທັບພະຍາ ລາຊະສຸພາວະດີ ທີ່ໄດ້ຮັບຄຳສັ່ງໃຫ້ມາຕີ ເມືອງ ຈຳ ປາສັກ ໄດ້ເດີນທາງມາທາງ ເມືອງ ສຸວັນນະພູມ ເພື່ອມາເກັບເກນສະບຽງອາຫານທີ່ເມືອງນີ້. ພໍ ມາຮອດ ເມືອງ ພິມາຍ ກໍໄດ້ພົບກັບກອງທັບຂອງ ເຈົ້າ ໂຖງ (ຫລານຂອງເຈົ້າ ອະນຸວົງ) ທີ່ຕັ້ງ ຄ້າຍຮັບຢູ່ ບ້ານ ສະແກ້ວ. ກອງທັບ ເຈົ້າ ໂຖງ ໄດ້ຕໍ່ສູ້ກັບກອງທັບ ພະຍາ ລາຊະສຸພາວະດີ ຈົນ ສຸດຄວາມສາມາດ ແຕ່ຍ້ອນມີກຳລັງພົນ ແລະ ອາວຸດທີ່ດ້ອຍກວ່າ ຈຶ່ງຕ້ານບໍ່ໄຫວ ແລ້ວກໍປະ ຄ້າຍຖອຍໜີໄປທາງເມືອງ ອຸບົນ.

ຕໍ່ມາພະຍາ ລາຊະສຸພາວະດີ ຈຶ່ງຍົກທັບໄປຕີກອງທັບຂອງ ເຈົ້າ ຕິດສະ ຢູ່ເມືອງ ພະໂຍ, ພໍຂຶ້ນມາເຖິງ ເມືອງ ຂອນແກ່ນ ແລ້ວເຂົາກໍໃຊ້ເລ່ກົນ ສ້າງຄວາມແຕກແຍກ ພາຍໃນກອງທັບ ລາວ ໂດຍສ້າງຂ່າວລື ແລະ ຂຽນໜັງສືຫລອກລວງໄປຫາເຈົ້າ ຕິດສະ ຢູ່ເມືອງ ຍະໂສທອນ ຊຶ່ງ ເພິ່ນໄດ້ເວົ້າໄວ້ວ່າ: " ເຈົ້າ ອະນຸວົງ ຈະເປັນກະບົດຕໍ່ ບາງກອກ ແລະ ດຽວນີ້ກໍແມ່ນຈິງ ດັ່ງທີ່ໄດ້ ຄາດຄະເນແລ້ວ, ໃຫ້ເຈົ້າ ອຸປະຣາດ ກັບໄປຕີເມືອງວຽງຈັນ ໃຫ້ແຕກໂດຍໄວ ແລ້ວທັບຫລວງ ກໍຈະບໍ່ໄປຕີຄວາມດີ, ຄວາມຊອບກໍຈະຕົກຢູ່ແກ່ ເຈົ້າ ອຸປະຣາດ ຢ່າງມາກມາຍແຕ່ຝ່າຍດຽວ ເຈົ້າ ອຸປະຣາດ ຈະວ່າຢ່າງໃດກໍໃຫ້ຕອບກັບໂດຍໄວ".

ເຈົ້າ ອຸປະຣາດໄດ້ຮັບ ແລະ ອ່ານເບິ່ງແຕ່ບໍ່ຕອບ, ແລ້ວເອົາໜັງສືນັ້ນໄປເຖິງ ເຈົ້າ ອະນຸ ວົງ ທີ່ພູເຂົ້າສານ ເພື່ອສະແດງຕົນເປັນຜູ້ບໍລິສຸດ ແລະ ໃຫ້ເຈົ້າ ອະນຸວົງ ຮູ້ວ່າອັນນີ້ແມ່ນກົນອຸ ບາຍຂອງສະຫຍາມ ທີ່ຍິວະເຍົ້າໃຫ້ແຕກກັນ, ສ່ວນເຈົ້າ ອະນຸວົງ ກໍບໍ່ມີຄວາມສົງໄສຫຍັງຍ້ອນ ວ່າກອງທັບຂອງ ເຈົ້າ ອຸປະຣາດ ນີ້ ກໍມີລູກຊາຍຂອງຕົນເອງຄື ເຈົ້າ ຂີ່ເທີ່ຍ ເປັນນາຍທັບຄົນສຳ ຄັນຢູ່ນຳ ແລະ ຂ່າວວ່າ ວຽງຈັນ ເປັນ " ກະບົດ " ນັ້ນກໍ່ເກີດຂຶ້ນ ໃນປີ 1822.

ເຈົ້າ ອຸປະຣາດ ເຫັນກອງທັບສະຫຍາມ ເໜືອກວ່າທັງກຳລັງພົນ ແລະ ອາວຸດຍຸດທະພັນ ທັງໃຊ້ກົນເສີກຢ່າງຮອບດ້ານ, ຈຶ່ງໄດ້ຖອຍທັບໄປຕັ້ງຢູ່ເມືອງ ໜອງຫານ ອີກແຫ່ງໜຶ່ງ. ກ່ອນຈະ ຍົກອອກມາຕັ້ງຢູ່ ເມືອງ ຍະໂສທອນ ເຈົ້າ ອຸປະຣາດ ກໍໄດ້ຈັດຕັ້ງການປ້ອງກັນເມືອງນີ້ໄວ້ຢ່າງ

ແຂງແຮງທັ້ງຍັງໄດ້ໄປຕັ້ງສູ້ຮົບຢູ່ ເມືອງ ໜອງຫານ ນຳອີກ. ອັນໄດ້ເຮັດໃຫ້ ພະຍາ ລາຊະສຸພາ ອະດີ ບໍ່ພໍໃຈ ຈຶ່ງຍົກທັບເຂົ້າມາຕີເມືອງຢ່າງປ່ວງບ້າທັ້ງຂີ່ມຊູ່ຕ່າງໆ ແຕ່ປະຊາຊົນ ເມືອງ ຍະໂສ ທອນ ກໍໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຢ່າງແຂງແຮງ ບໍ່ຍອມອ່ອນຕໍ່ພວກເຂົາ. ແຕ່ຍ້ອນມີກຳລັງນ້ອຍ ກ່ວາປະຊາຊົນ ເມືອງ ຍະໂສທອນ ຈຶ່ງຕໍ່ສູ້ໄດ້ພຽງແຕ່ 2 ມື້ເທົ່ານັ້ນ ແລ້ວກໍພ່າຍແພ້ໃຫ້ກອງທັບ ສະຫຍາມ. ພໍພະຍາ ລາຊະສຸພາອະດີ ເຂົ້າໄປໄດ້ກໍສັ່ງໃຫ້ຈັບເມຍຍາດຕີພີ່ນ້ອງຂອງ ອຸປະຣາດ ຕິດສະ ເມືອງ ຍະໂສທອນ ຕະຫລອດຮອດປະຊາຊົນຜູ້ຮັກຊາດ ທີ່ເຂົ້າກັບ ເຈົ້າ ອະນຸວົງ ນັ້ນໄດ້ 160 ຄົນ. ແລ້ວພະຍາ ລະຊະສຸພາອະດີ ກໍນຳເອົາມາເຜົາໄຟທັ້ງເປັນຢູ່ຂ້າງແມ່ນ້ຳຊີ, ຊຶ່ງປັນ ການກະທຳທີ່ໂຫດຮ້າຍປ່າເຖື່ອນ ຕໍ່ປະຊາຊົນລາວຜູ້ຮັກຊາດ ແລະ ເຮັດໃຫ້ປະຊາຊົນລາວ ຍິ່ງ ຄຽດແຄ້ນຕໍ່ສະຫຍາມ ແລ້ວໄປເຂົ້າກັບ ເຈົ້າ ອຸປະຣາດຕິດສະ ຢູ່ເທິງໜອງຫານ ເຮັດໃຫ້ກອງ ທັບຂອງ ເຈົ້າ ລາຊະສຸພາອະດີ ມີຄວາມຢ້ານກົວຂຶ້ນຕື່ມ.

ຝ່າຍກົມພະລາຊະວັງບໍ່ວອນ ແມ່ທັບໃຫຍ່ສະຫຍາມ ທີ່ຕັ້ງຢູ່ ນະຄອນລາຊະສີມາ ນັ້ນ ກໍ ໄດ້ຈັດທັບຂຶ້ນ 5 ທັບຄື ທັບຂອງ ພະຍາ ຈ່າແສນຍາກອນ, ພະຍາ ກະລາໂຫມ, ພະຍາ ລະມຸມີ ຕີ, ພະຍາ ລົງຄະວິໄຊ ແລະ ພະຍາ ມະຫາໂຍທາ ລວມພົນທັ້ງໝົດ 8400 ຄົນ ພ້ອມດ້ວຍຊ້າງ ມ້າເປັນພາຫະນະ ແລະ ລູກປືນ ຢ່າງພຽງພໍແລ້ວ ກໍສັ່ງໃຫ້ຍົກພົນລ່ວງໜ້າໄປທາງ ບ້ານ ສາມ ໝໍ້ ແລ້ວ ເພື່ອໃຫ້ໄປຊ່ວຍລະດົມກັນເຂົ້າຕີຄ້າຍ ໜອງບົວລຳພູ.

ຕໍ່ມາ ວັນເສົາ ເດືອນ 6 ຂຶ້ນ 10 ຄ່ຳ (1827) ກອງທັບຫລວງຂອງ ກົມພະລາຊະວັງບໍ ວອນ ຈຶ່ງໄດ້ຍົກຈາກ ໂຄລາດ ມາຮອດ ບ້ານ ນ້ຳເຊີນ ແລະ ຕັ້ງຄ້າຍຢູ່ທີ່ນີ້ເພື່ອຊ່ວຍໂຈມຕີຄ້າຍ ໜອງບົວລຳພູ. ສ່ວນກອງທັບລາວ ທີ່ຄ້າຍ ໜອງບົວລຳພູ ນັ້ນແມ່ນ ພະຍາ ນະລິນ (ເຈົ້າເມືອງ ສີມຸນ ດຽວນີ້ແມ່ນ ເມືອງ ຈະຕຸລັດ) ເປັນແມ່ທັບ ມີຈຳນວນພົນພຽງແຕ່ 3.000 ຄົນ ເທົ່ານັ້ນທັ້ງ ມີອາວຸດທີ່ບໍ່ທັນສະໄໝຄືກັບສະຫຍາມ ທີ່ໄດ້ຮັບມາຈາກນາຍທຶນຕາເວັນຕົກ ແຕ່ກອງທັບພະ ຍາ ນະລິນ ກໍໄດ້ຕໍ່ສູ້ຢ່າງແຂງແຮງບໍ່ຍອມປະຄ້າຍຢ່າງເດັດຂາດ. ກອງທັບສະຫຍາມທັ້ງ 6 ກອງ ໄດ້ລະດົມກັນເຂົ້າຕີຄ້າຍທະຫານລາວຢ່າງໜັກໜ່ວງ. ພິເສດແມ່ນກອງທັບຂອງ ພະຍາ ມະຫາ ໂຍທາ (ທໍເລີຍ) ທີ່ໄດ້ເຂົ້າຕະລຸມບອນ ຕີກອງທັບລາວຢ່າງປ່ວງບ້າ; ເຖິງຢ່າງໃດກໍຕາມກອງ ທັບ ພະຍາ ນະລິນ ກໍໄດ້ຕໍ່ສູ້ຢ່າງອົງອາດກ້າຫານ ແລະ ສາມາດຂ້ານາຍທັບຂອງສະຫຍາມໄດ້ ຫລາຍຄົນ ເຊັ່ນ: ພະຍາ ກຽດ, ຫລວງພັກດີນຸລັກ, ຫລວງພິພິດສົມບັດ, ຫລວງລາພິທັກ, ສະມິງ ບາບອົງອະ, ສະມິງສາຊະເທວະ, ສະມິງນະລາຈອນສຸລະ... ສ່ວນໄພ່ພົນນັ້ນ ແມ່ນຖືກຂ້າຕາຍ ຢ່າງຫລວງຫລາຍຈົນນັບບໍ່ຖ້ວນ; ແຕ່ຍ້ອນສະຫຍາມເໜືອກວ່າທັ້ງກຳລັງ ແລະ ອາວຸດກອງທັບ ລາວ ພະຍາ ນະລິນ ຈຶ່ງສາມາດຕໍ່ສູ້ໄດ້ພຽງແຕ່ 3 ມື້ 3 ຄືນ ເຖິງຢ່າງໃດກໍຕາມ ພະຍາ ນະລິນ ກໍ

ບ່ຍອມຖອຍ ເມື່ອກອງທັບສະຫຍາມເຂົ້າຄ້າຍໄດ້ແລ້ວ ກໍຈັບເອົາພະຍາ ນະລິນ ມາໃສ່ຄຸກແລ້ວ ສົ່ງໄປໃຫ້ກົມພະລາຊະວັງບໍ່ອອນ. ແມ່ທັບຫລວງຂອງສະຫຍາມຖາມວ່າ: " ຈະຍອມອ່ອນນ້ອມ ຫລື ບໍ່, ຖ້າຍອມຈະລ້ຽງໄວ້ ". ພະຍາ ນະລິນ ຕອບວ່າ: " ຕົນແມ່ນລາວ ຊາຍຊາດທະຫານຈະບໍ່ ມີວັນຍອມອ່ອນນ້ອມຕໍ່ສັດຕູຢ່າງເດັດຂາດ, ຂໍຕາຍດີກວ່າ "ແລ້ວ ແມ່ທັບສະຫຍາມ ຈຶ່ງເອົາ ຊ້າງເຂົ້າແທງ ພະຍາ ນະລິນ ຈົນຕາຍ. ເມື່ອກອງທັບສະຫຍາມຕີຄ້າຍ ໜອງບົວລຳພູ ໄດ້ແລ້ວ ກໍຍົກມາຕີກອງທັບລາວຢູ່ ທົ່ງສົ້ມປ່ອຍ ຫ່າງຈາກຊ່ອງເຂົ້າສານ ປະມານ 10 ຫລັກ. ການຕໍ່ສູ້ ຂອງພະຍາ ນະລິນ ຄັ້ງນີ້ເປັນການຕໍ່ສູ້ທີ່ອົງອາດກ້າຫານທີ່ສຸດ, ເປັນການເສຍສະຫລະ ເພື່ອປະ ເທດຊາດຢ່າງສົມສັກສີ.

ກອງທັບສະຫຍາມ 3 ທັບ ຄື: ທັບຂອງ ພະຍາ ໄພພູທອນ 5.00 ຄົນ, ທັບຂອງພະຍາ ເພັດພິໄຊ ແລະ ພະຍາ ໂຄສາ 5.000 ຄົນ ລວມທັງໝົດເປັນ 10.000 ຄົນ, ທີ່ຍົກຂຶ້ນມາຕີ ເມືອງ ຫຼົ່ມ ສັກ ນັ້ນ ກໍໄດ້ປະທະກັບກອງທັບຂອງ ເຈົ້າ ລາດຊະວົງ. ກອງທັບ ຂອງ ເຈົ້າ ລາດຊະວົງ ໄດ້ຕໍ່ສູ້ກັບກອງທັບສະຫຍາມ ທັງ 3 ກອງ ຈົນສຸດຄວາມສາມາດ ແຕ່ຍ້ອນອາວຸດ ແລະ ກຳລັງພົນດ້ອຍກ່ວາ ສະຫຍາມ ເພິ່ນຈຶ່ງຈຳເປັນຕ້ອງຖອຍທັບໜີ ມາຊ່ອງພູເຂົ້າສານ ເພື່ອສົມທົບກັບກຳລັງຂອງ ເຈົ້າ ອະນຸວົງ. ໃນການສູ້ຮົບກັນຄັ້ງນີ້ ພະຍາ ສຸລິຍະວົງສາ ເຈົ້າເມືອງ ຫຼົ່ມສັກ ກໍພາໄພ່ພົນໜີຕາມມາ ນຳຢ່າງຫລວງຫລາຍ.



ເຈົ້າ ລາຊະວົງ ແມ່ທັບໃຫຍ່ ຂອງລາວ ໃນປີ 1826 - 1829.

ເມື່ອກອງທັບສະຫຍາມ ຕີຄ້າຍ ໜອງບົວລຳພູ ແຕກແລ້ວ ກອງທັບໜ້າ 5 ທັບນັ້ນ ກໍຍົກ ມາກຽມຕີຄ້າຍລາວຢູ່ ທົ່ງສົ້ມປ່ອຍ ໂລດ. ຈາກນັ້ນ ກົມໝື່ນນາເລດໂຍທິ, ກົມໝື່ນເສນີບໍລິລັກ ແລະ ພະຍາ ສະເໜ່ຫາພູທອນ ຈຶ່ງຄຸມພົນ 4.000 ຄົນ ເປັນກອງໜ້າ, ເຈົ້າ ຊຸນເນນ ຄຸມຄົນພະ ມ້າທະວາຍເປັນກອງຫຼວນຢ່າງເດີ່ມ, ໂດຍມີທະຫານເມືອງ ນະຄອນລາຊະສີມາ ເຂົ້າສົມທົບ ນຳ ເຈົ້າ ຊຸນເນນ ນຳອີກ ລວມເປັນພັນກວ່າຄົນ ເພື່ອຄອຍຕີກອງລຳລ່ຽງລາວ ທີ່ຈະນຳເອົາສະ ບຽງອາຫານສົ່ງກັນ. ເມື່ອກອງທັບຂອງກົມໝື່ນທັງສອງຍົກມາແລ້ວ ຈຶ່ງສັ່ງໃຫ້ກອງທັບໜ້າ ທັງ 5 ກອງທັບ ທີ່ຍົກມາກ່ອນນັ້ນ ເຂົ້າຕັ້ງຄ້າຍອ້ອມກອງທັບລາວໄວ້ຫລາຍດ້ານ.

ຝ່າຍພະຍາ ຊຽງຂວາ ແລະ ພະຍາ ໜໍ່ຄຳ ແມ່ທັບລາວ ທີ່ຄ້າຍ ທົ່ງສົ້ມປ່ອຍ ໄດ້ຈັດທັບ ອອກຈາກຄ້າຍຕົນ ເພື່ອໄປຕີກອງທັບສະຫຍາມ ທີ່ໄດ້ເຂົ້າມາຕັ້ງຄ້າຍຢູ່ໃກ້ນັ້ນ ແລະ ໄດ້ສູ້ຮົບ ກັນຢ່າງສຸດຄວາມສາມາດກໍຍັງຕີສັດຕູບໍ່ແຕກ. ເຈົ້າ ໜໍ່ຄຳ ແລະ ພະຍາ ຊຽງຂວາ ຫລັງຈາກປຶກ


ສາກັນແລ້ວ ຈຶ່ງຈັດກອງທັບໃຫຍ່ ອອກໄປຕີກັບສະຫຍາມ ໃຫ້ມັນແຕກໂດຍໄວ. ຄິດດັ່ງນັ້ນຈຶ່ງ ຈັດກອງທັບອອກເປັນ 5 ກອງ ຄື: ໃຫ້ ກອງຄຳ ເປັນແມ່ທັບ ຄຸມຄົນ 4.000 ຄົນ, ພະຍາ ແສນ ເປັນແມ່ທັບຄຸມຄົນ 4.000 ຄົນ, ໃຫ້ພະຍາ ນ່ານ ມີເຫລັກ ເປັນແມ່ທັບ ຄຸມຄົນ 4.000 ຄົນ ລວມເປັນ 8.000 ຄົນ ເປັນກອງກ້າຕາຍ, ໃຫ້ຍົກທັບໄປດັກສະກັດຢູ່ໃນປ່າ 2 ຟາກທາງ ຄອຍຕີ ກອງທັບສະຫຍາມ ບໍ່ໃຫ້ມາຊ່ວຍກັນໄດ້; ໃຫ້ພະຍາ ເສືອຫານ ເປັນແມ່ທັບ ຄຸມພົນ 2.000 ຄົນ ຍົກໄປຮັກສາໜອງນ້ຳ ຕາມທາງໄວ້ ບໍ່ໃຫ້ກອງທັບສະຫຍາມນຳໃຊ້ນ້ຳໄດ້; ໃຫ້ທ້າວ ມະຫາວົງ ກັບທ້າວ ພົນພັກ ເປັນແມ່ກອງ ຄຸມພົນ 2.000 ຄົນ ໃຫ້ຍົກໄປຕັດຕົ້ນທາງທີ່ກອງທັບສະຫຍາມ ຈະມາ ເພື່ອໃຫ້ສະຫຍາມ ເຄື່ອນທັບຊ້າລົງ ທັງໃຫ້ຕັດເຄືອໄມ້ຢາເບື່ອຕ່າງໆ ໄປຖິ້ມໃສ່ຫ້ວຍ ໜອງຕ່າງໆ ຕາມທີ່ກອງທັບສະຫຍາມຈະມາຕາມຫລັງ; ທັງໃຫ້ເກັບເອົາສົບຄົນຕາຍ, ສົບງົວ ຄວາຍຕາຍ ບັນທຸກໃສ່ກວຽນລໍ້ ໄປຖິ້ມລົງຫ້ວຍ ແລະ ໜອງທຸກບ່ອນ ທີ່ກອງທັບສະຫຍາມຈະ ຂຶ້ນມາຫາທີ່ງສົ້ມປ່ອຍ, ໃຫ້ພະຍາ ໄຊສົງຄາມ ເພັດສຸວັນ ແລະ ທ້າວ ມີ ຄຸມທະຫານ 2.000 ຄົນ ຢູ່ຮັກສາທີ່ງສົ້ມປ່ອຍແລ້ວ ໃຫ້ເຈົ້າ ໜໍ່ຄຳ ແລະ ພະຍາ ຊຽງຂວາ ຍົກທັບໃຫຍ່ອອກຈາກ ທີ່ງສົ້ມປ່ອຍ ໄປຕີສະຫຍາມ ໂດຍເຈົ້າ ໜໍ່ຄຳ ຂຶ້ນມ້າສີຂາວ ພູກເພົ້າ ດ້ວຍເຄື່ອງຄຳທັງໝົດ, ມືຖືຫອກໃຫຍ່ ຍົກອອກຈາກຄ້າຍໃຫຍ່ ນຳໜ້າທະຫານ ກົງໄປຕີຄ້າຍສະຫຍາມ.

ຝ່າຍສະຫຍາມ ໄດ້ຍົກທັບອອກຕໍ່ສູ້ໂດຍ ພະຍາ ສະເໜ່ຫາພູທອມ ແລະ ພະຍາ ວິລູກ ໂກລາ ແຕ່ຝ່າຍສະຫຍາມປະລາໄຊໃນການຕໍ່ສູ້ກັນຄັ້ງນີ້. ຫລັງຈາກນັ້ນ ພວກເຂົາຈຶ່ງແຕກຖອຍ ໄປຢູ່ຄ້າຍໝົດ ແລະ ພະຍາຍາມຮັກສາຄ້າຍ ດ້ວຍການຍິງປືນໃຫຍ່ອອກໄລ່ຝ່າຍລາວ ຢູ່ບໍ່ໄດ້ ຂາດ. ສ່ວນຝ່າຍລາວ ບໍ່ມີປືນພຽງພໍ ຈຶ່ງບໍ່ສາມາດຕີຄ້າຍໃຫ້ແຕກໄດ້ ມີແຕ່ຕັ້ງຄ້າຍລ້ອມສະ ຫຍາມໄວ້ ທັງ 4 ດ້ານ ໃນໄລຍະທີ່ປືນໃຫຍ່ຂອງສະຫຍາມ ຍິງມາບໍ່ເຖິງ, ພ້ອມດຽວກັນນີ້ ກໍຂຸດ ຂຸມຄອງ ເພື່ອບັງລູກປືນໃຫຍ່ ກອງທັບລາວໄດ້ຕັ້ງຄ້າຍລ້ອມສະຫຍາມໄວ້ເປັນຫລາຍວັນ. ເວ ລາກອງທັບສະຫຍາມໃກ້ຈະແຕກຢູ່ນັ້ນ, ກົມໝື່ນມະເລດໂຍທິ ແລະ ກົມໝື່ນເສນີບໍລິລັກ ແມ່ ທັບສະຫຍາມ ເມື່ອຮູ້ຂ່າວວ່າກອງທັບຝ່າຍຕົນຖືກປິດລ້ອມຢູ່ ຈຶ່ງຟ້າວຍົກທັບມາຊ່ວຍກັນ. ພໍ ຍົກທັບມາຮອດປ່າດົງ ຕະຄຸ່ມ ກໍຖືກກອງທັບ ພະຍາ ແສນທານ ກັບພະຍາ ນ່ານ ມີເຫລັກ ຊຶ່ງ ຄຸມພົນ 8.000 ຄົນ ດັກສະກັດກາງປ່າ ເຖິງຂັ້ນຕະລຸມບອນ ພ້ອມທັງໃຊ້ກອງທັບຊ້າງ ເຂົ້າລ້ອມ ກອງທັບສະຫຍາມ ແລະ ຂັບຊ້າງ ເຂົ້າຟັນແທງທະຫານສະຫຍາມ ລົ້ມຕາຍຢ່າງຫລວງຫລາຍ; ກອງທັບລາວ ເຖິງຈະສາມາດລ້ອມກອງທັບສະຫຍາມໄວ້ ແລະ ມີກຳລັງພົນຫລາຍກວ່າກໍຕາມ ແຕ່. ຊ້ຳພັດຂາດອາວຸດ. ສ່ວນສະຫຍາມນັ້ນ ຊ້ຳພັດມີອາວຸດທີ່ທັນສະໄໝແບບເອີຣົບ, ໂດຍສະ ເພາະແລ້ວ ແມ່ນແມ່ທັບນາຍກອງ ດັ່ງນັ້ນ ພວກເຂົາຈຶ່ງສາມາດຍິງໃສ່ຊ້າງລາວ ໃຫ້ແຕກຕື່ນ ແລະ ໃນທີ່ສຸດກໍສາມາດຜ່າວົງປິດລ້ອມອອກໄປໄດ້.

ເຈົ້າ ຂຸນເນນ ທີ່ເປັນນາຍທັບກອງຫລອມ ເມື່ອໄດ້ຮູ້ວ່າ ເຈົ້າ ໜໍ່ຄຳ ກັບແມ່ທັບໃຫຍ່ຂອງ ສະຫຍາມໄດ້ຍົກອອກມາຈາກຄ້າຍແລ້ວ, ຍັງເຫລືອແຕ່ ທ້າວ ເພຍຄຸມ ແລະ ທະຫານ 1.000 ຄົນ ເພື່ອຢູ່ຮັກສາຄ້າຍ, ຈຶ່ງໃຊ້ກົນອຸບາຍໃຫ້ທະຫານຕົນ 6 ຄົນ ແຕ່ງກາຍປອມຕົວເປັນທະຫານ ລາວ ເຂົ້າຈູດເຜົາຄ້າຍລາວໃນຕອນຄ່ຳ ເຮັດໃຫ້ເກີດຄວາມສັບສົນ ແລ້ວກອງທັບ ເຈົ້າ ຂຸນເນນ ແລະ ພະຍາ ສິງຄາມ ກໍ່ບຸກເຂົ້າຕີເຮັດໃຫ້ຄ້າຍລາວ ທີ່ງສົ້ມປ່ອຍ ແຕກ.

ເວລາໄຟພວມລຸກໄໝ້ຂຶ້ນນັ້ນ ກອງທັບ ເຈົ້າ ໜໍ່ຄຳ ທີ່ລ້ອມກອງທັບສະຫຍາມຢູ່ ກໍໄດ້ ຖອນທັບຕົນມາຊ່ວຍທັບໃຫຍ່ລາວ ແຕ່ກໍຖືກກອງທັບຂອງ ຂຸນເນນ ທີ່ມີອາວຸດເໜືອກວ່າໄລ່ຍິງ ຢ່າງໜັກໜ່ວງ ອັນເຮັດໃຫ້ທະຫານລາວ ລົ້ມຕາຍຢ່າງຫລວງຫລາຍ ແລ້ວເຈົ້າ ໜໍ່ຄຳ ແລະ ທະ ຫານ 200 ກວ່າຄົນ ທີ່ເຫລືອກໍ່ພາກັນໄປຄ້າຍຊ່ອງເຂົ້າສານ, ສ່ວນກອງທັບສະຫຍາມ ທີ່ຖືກ ປິດລ້ອມຢູ່ນັ້ນ ກໍໄດ້ຜ່າວົງປິດລ້ອມອອກໄປໄດ້. ເມື່ອຢຶດຄ້າຍ ທີ່ງສົ້ມປ່ອຍ ໄດ້ແລ້ວ ກົມພະລາ ຊະວັງບໍ່ອອນ ພ້ອມນາຍກອງແມ່ທັບ ກໍໄດ້ເຂົ້າຕັ້ງຄ້າຍໃຫຍ່ຢູ່ ທີ່ງສົ້ມປ່ອຍ ນັ້ນ.

ເຈົ້າອະນຸວົງ ທີ່ຕັ້ງຄ້າຍຢູ່ຊ່ອງເຂົ້າສານນັ້ນ ເມື່ອຮູ້ວ່າຄ້າຍໜອງບົວລຳພູ, ຄ້າຍສົ້ມປ່ອຍ, ຄ້າຍທີ່ງລຳພີ ແລະ ຄ້າຍຫຼົ້ມສັກແຕກ ຍ້ອນສູ້ອາວຸດທີ່ທັນສະໄໝຂອງສະຫຍາມບໍ່ໄດ້ ຄືແນວ ນັ້ນ ຈຶ່ງໄດ້ສົ່ງ ພະຍາ ສຸໂພ ກັບ ຊານົນ ຊຶ່ງແມ່ນຂຸນນາງຜູ້ໃຫ່ຍ ໄປຮັບໜ້າທີ່ສືບຕໍ່ນຳພາກອງ ທັບລາວ ເຂົ້າໂຈມຕີກອງທັບສະຫຍາມ ຢູ່ທີ່ງສົ້ມປ່ອຍໃຫ້ແຕກ. ສ່ວນເຈົ້າ ອະນຸວົງ ນັ້ນ ເພີ່ນກໍ ນຳກຳລັງທະຫານຈຳນວນໜຶ່ງກັບຄືນມາວຽງຈັນ ເພື່ອກະກຽມປ້ອງກັນ ແລະ ກະກຽມຍົກຍ້າຍ ຊັບສົມບັດອັນມີຄ່າຕ່າງໆ ອອກຈາກ ນະຄອນຫລວງ ໄປໄວ້ບ່ອນປອດໄພ ແລະ ກຽມເຮັດສົງ ຄາມແບບຍາວນານຕ້ານພວກສະຫຍາມຕໍ່ໄປ.



ຮູບຈິນຕະນາການສະແດງເຖິງ

ເຈົ້າ ອະນຸວົງ ອອກສູ້ຮົບ ປີ 1827

ຫລັງຈາກ ເຈົ້າ ອະນຸວົງ ກັບມາວຽງຈັນແລ້ວ ພະຍາ ສຸໂພ ກັບ ຊານິນ ໄດ້ວາງແຜນໂຈມຕີຄ້າຍໃຫຍ່ ສະຫຍາມທີ່ເຂົ້າມາຕັ້ງຢູ່ ທົ່ງສົ້ມປ່ອຍ ນັ້ນ ຕາມຄຳສັ່ງຂອງ ເຈົ້າ ອະນຸວົງ ໂດຍມີໜັງສືໄປເຖິງ ພະຍາ ຊຽງສາ ທີ່ຕັ້ງຄ້າຍຢູ່ທັນສະໜົມ ພະຍາ ຄຳ, ເພັຍສຸລິນ ແລະ ຜູ້ອື່ນໆ ເພື່ອໃຫ້ມາຊ່ວຍກັນຕີຄ້າຍຂອງສະຫຍາມຢູ່ທົ່ງສົ້ມປ່ອຍ ໃຫ້ແຕກຕາມ ເຈົ້າ ອະນຸວົງ ສັ່ງໄວ້. ພະຍາ ຊຽງສາ, ກອງຄຳ, ເພັຍສຸລິນ ຈຶ່ງໄດ້ຍົກທັບໄປລ້ອມຄ້າຍໃຫຍ່ສະຫຍາມ, ພະຍາ ສຸໂພ ກໍ່ຍົກທັບໃຫຍ່ໄປລ້ອມພ້ອມກັນ. ກອງທັບໃຫຍ່ສະຫຍາມ ເມື່ອເຫັນກອງທັບໃຫຍ່ຂອງລາວ ຍົກພົນມາຫລາຍ ຈຶ່ງບໍ່ກ້າອອກມາສູ້ລົບກັບກອງທັບລາວ ພວກເຂົາຈຶ່ງພາກັນເຂົ້າໄປກຽມພ້ອມປ້ອງກັນຢູ່ໃນຄ້າຍ; ເມື່ອກອງທັບລາວເຂົ້າບຸກຕີພວກສະຫຍາມກໍໂຕ້ຕອບສຸດຂີດ ໂດຍການໃຊ້ປືນທັນສະໄໝຍິງສະກັດກັ້ນໄວ້ຈຶ່ງເຮັດໃຫ້ກອງທັບລາວເຂົ້າໃນຄ້າຍບໍ່ໄດ້, ເມື່ອເຂົ້າຄ້າຍສະຫຍາມບໍ່ໄດ້ກໍປິດລ້ອມຄ້າຍສະຫຍາມໄວ້ ເປັນເວລາ 7 ວັນ 7 ຄືນ ຈົນສະບຽງອາຫານຂອງເຂົາໝົດ. ເມື່ອເວລາກອງທັບຫລວງສະຫຍາມ ເກືອບຈະປະລາໄຊ ໃຫ້ແກ່ກອງທັບລາວຢູ່ແລ້ວ ກໍພໍດີກອງທັບກົມໝື່ນນະເລດໂຍທີ, ຂຶ້ນມາຊ່ວຍທັນ ໃນເດືອນ 6 ແຮມ 1 ຄ່ຳ. ເຖິງວ່າກອງທັບນີ້ມີທະຫານພຽງແຕ່ 100 ກວ່າຄົນ ເທົ່ານັ້ນກໍຕາມແຕ່ ຍ້ອນມີອາວຸດທັນສະໄໝກວ່າ ຈຶ່ງສາມາດຕໍ່ສູ້ກັບກອງທັບລາວໄດ້ຫລາຍວັນ ເພື່ອລໍຖ້າກອງໜູນຂອງກົມ ໝື່ນເສນີບໍລິລັກ ຂຶ້ນມາຊ່ວຍ. ເມື່ອກອງທັບ ພະຍາ ເສນີບໍລິລັກ ຂຶ້ນມາຮອດ ໃນວັນທິດ ເດືອນ 6 ແຮມ 3 ຄ່ຳ ກໍສາມາດສົມທົບກັນຕີກອງທັບລາວໃຫ້ແຕກອອກໄປລວມຢູ່ຄ້າຍພູເຂົ້າສານ, ສາມາດກູ້ເອົາພວກທີ່ຖືກປິດລ້ອມໄວ້ໄດ້.

ກົມພະລາຊະວັງບໍ່ວອນ ແມ່ທັບໃຫຍ່ຂອງສະຫຍາມ ຈັດທັບເຂົ້າຕີຄ້າຍໃຫຍ່ຂອງລາວຢູ່ ພູເຂົ້າສານ ໂດຍສັ່ງໃຫ້ ພະຍາ ຫາໂຍທາ ຄຸ້ມຄອງກອງທັບມອນ ຮັກສາຄ້າຍຢູ່ ທົ່ງສົ້ມປ່ອຍ; ໃຫ້ພະຍາ ພິມຍົກກະບັດ (ເມືອງ ໂຄລາດ) ຄຸມພົນ 500 ເປັນ ກອງລາດຕະເວນທີໜຶ່ງ; ໃຫ້ ພະຍາ ປະສິດ ຄະສະລະ ຄຸມພົນ 500 ຄົນ ແລະ ມີຊ້າງ 200 ໂຕ ເປັນກອງລາດຕະເວນທີ ສອງ ແລະ ໃຫ້ທັງສອງນີ້ ໄປລາດຕະເວນຮັກສາທາງທົ່ງນາ ຄະລາດ ບໍ່ໃຫ້ທະຫານລາວອອກຈາກວຽງຈັນ ແລະ ທາງອື່ນໆ ມາຊ່ວຍກອງທັບລາວຢູ່ ທົ່ງພູເຂົ້າສານໄດ້. ກົມລາຊະວັງບໍ່ວອນ ຍັງສັ່ງໃຫ້ ເຈົ້າ ຂຸນເນນ ເປັນກອງຫລອນ ໄປສະກັດກັ້ນຕົ້ນທາງຈາກວຽງຈັນ ມາຄ້າຍພູເຂົ້າສານ, ໃຫ້ກອງທັບ ພະຍາ ເສນາພູເບດ, ພະຍາ ພິໄຊບຸລີທະລາ, ພະຍາ ນະລິງວິໄຊ ແລະ ພະຍາ ວິສຸດໄກສາ ລວມ 4 ກອງ ມີພົນທະຫານ ກອງລະ 1.000 ຄົນ ເປັນທັບໜ້າຍົກໄປຕີຄ້າຍພູເຂົ້າສານ ດ້ານຕາເວັນຕົກ; ໃຫ້ພະຍາ ກະລາໂຫມ ລາຊະເສນາ, ພະຍາ ແສນຍາກອນ, ພະຍາ ວິເສດສົງຄາມ ຊຶ່ງແມ່ນກອງທະຫານເອີຣົບ ນັກຍິງປືນໃຫຍ່ກອງພິເສດ ລວມກັນເປັນ 3 ກອງ ມີທະຫານ 3.00 ຄົນ ຍົກໄປຕີຄ້າຍພູເຂົ້າສານ, ດ້ານຕາເວັນອອກສ່ຽງເໜືອ; ໃຫ້ພະຍາ

ສາດຕະລິດທິລິງ, ຫຼວງດຳເກີງລະມະພິນ, ຫລວງວຸດທະສາລະຊານ, ພະຍາ ອະໄພສອນເພິ່ງ, ພະຍາ ຈິນດາຈັກລັດ ລວມ 5 ກອງ ຄຸມພົນ 500 ຄົນ ຍົກທັບເຂົ້າຕີຄ້າຍພູເຂົ້າສານດ້ານໃຕ້; ໃຫ້ພະຍາ ສຸລິນທະລະນີ ຄຸມທະຫານ 600 ຄົນ ໄປຮັກສາຫ້ວຍນ້ຳລຳທານທຸກບ່ອນ ບໍ່ໃຫ້ທະຫານລາວໄດ້ໃຊ້ນ້ຳ; ໃຫ້ພະຍາ ລາຊະໂຍທາ ກັບພະຍາ ມະຫາອຳນາດ ຄຸມພົນ 1.000 ຄົນ ເປັນກອງໜູນໃຫ້ ພະຍາ ສະຫຍາມພູທອນ ຄຸມທະຫານ 1.000 ຄົນ ຮັກສາຄ້າຍຫລວງ ທ່ຽສົ້ມ ປ່ອຍຕົ້ນອີກ; ໃຫ້ພະຍາ ປະສິດທິສາດຕາ ເປັນກອງເສືອປ່າ ຍົກໄປຊ່ວຍທັບໜ້າໃຫ້ຫລວງລິດ ສຳແດງ ຄຸມທະຫານເອີ້ຣົບ ຊຶ່ງແມ່ນກອງທັບປືນໃຫຍ່ 300 ຄົນ ເປັນກອງກ້າສູ້ຕາຍ ໄປກັບກອງທັບຫລວງ. ໃຫ້ຫລວງ ຜ່ານທິພົບ ຄຸມກອງທະຫານມ້າ 200 ຄົນ ເປັນກອງສົບຂ່າວ; ໃຫ້ພະຍາ ປະກິດນຸລົກ ຄຸມທະຫານຊ້າງ 800 ໂຕ ບຸກຕີຄ້າຍ ພູເຂົ້າສານ ພ້ອມກັບກອງທັບອື່ນໆ.

ຢູ່ຄ້າຍພູເຂົ້າສານ ນັ້ນກອງທັບລາວ ໄດ້ຈັດການຕັ້ງຮັບຢ່າງເຂັ້ມແຂງ ບັນດາປ້ອມປະຕູສູ້ຮົບ ແລະ ຄ້າຍຄູຕ່າງໆ ໄດ້ມີ ຂວາກໜາມ ແລະ ທະຫານ ປະຈຳຢ່າງຄຶບຖ້ວນ, ທັ້ງຍັງເກນກອງທັບລາວ ຫົວເມືອງຂຶ້ນໄປສົມທົບໄດ້ຫລາຍພັນຄົນ ແລະ ທັນເວລາ. ພະຍາ ສຸໂພ, ຊານິນ ແລະ ແມ່ທັບນາຍກອງທ້າງປວງ ໄດ້ເຫັນພ້ອມນຳກັນວ່າ ກອງທັບຂອງຝ່າຍສະຫຍາມ ທີ່ຍົກຂຶ້ນມາຄາວນີ້ ມີກຳລັງຫລາຍ ແລະ ອາວຸດທັນສະໄໝກວ່າລາວ ແຕ່ວ່າພວກເຂົາຈະບໍ່ສູ້ຮົບໄດ້ດົນ ຍ້ອນກອງທັບມາໄກ ແລະ ສະບຽງອາຫານບໍ່ພຽງພໍ, ຢ່າງຫລາຍກໍ່ກຸ້ມໄດ້ 3 ເດືອນ ພວກເຮົາ ມີແຕ່ຊ່ວຍກັນປ້ອງກັນຄ້າຍໄວ້ຢ່າງແຂງແຮງ ແລ້ວສັ່ງໃຫ້ກອງລາດຕະເວນ ອອກລັດຕີກອງລຳລຽງຂອງສະຫຍາມ ບໍ່ໃຫ້ສົ່ງສະບຽງອາຫານໃຫ້ແກ່ກັນໄດ້ຈັກ 1 ເດືອນປາຍ ກອງທັບສະຫຍາມ ກໍ່ຈະຂາດສະບຽງອາຫານ ແລະ ອ່ອນລົງ ລໍຖ້າເວລານັ້ນແລ້ວ ພວກເຮົາອອກໂຈມຕີກໍຈະໄດ້ໄຊຊະນະ.

ເມື່ອກອງທັບສະຫຍາມ ຍົກທັບຂຶ້ນມາອ້ອມຄ້າຍລາວ 6 - 7 ວັນ ແລ້ວບໍ່ເຫັນກອງທັບລາວ ຍົກມາຕີຕາມທຳນຽມເສິກໃຫຍ່ ຈຶ່ງຄິດຢ້ານຕົກຖືກກົນອຸບາຍຂອງຝ່າຍລາວ. ພວກເຂົາຈຶ່ງສັ່ງໃຫ້ພ້ອມກັນບຸກໂຈມຕີຄ້າຍໝົດທຸກດ້ານ ໂດຍສັ່ງໃຫ້ກອງທັບ ພະຍາ ຈ່າແສນດອນ, ພະຍາ ທາອຳນາດ, ພະຍາ ກາລາຊະເສນາ, ພະຍາ ສີລໍລະລາດ ເຂົ້າຄ້າຍພະຍາ ສຸໂພ; ໃຫ້ກອງທັບພະຍາ ລາຊະໂຍທາ, ພະຍາ ເສນພູເບດ, ພະຍາ ບໍລິລັກລາຊາ, ພະຍາ ອັດສະດາເຮືອງເດດ ເຂົ້າໂຈມຕີຄ້າຍ ພະຍາ ມືໄຟ, ພະຍາ ມືເຫລັກ, ພະຍາ ຊຽງໃຕ້, ພະຍາ ຊຽງເໜືອ ແລະ ຄ້າຍຂອງລາວອື່ນໆ. ພິເສດຝ່າຍສະຫຍາມຍັງມີອາສາສະໝັກພິເສດ 8 ກອງ ເຊັ່ນ: ກອງອາສາຍີ່ປຸ່ນ, ກອງແກ້ວຈິນດາ... ເປັນກອງບຸກຕີຄ້າຍປີກຂວາຂອງລາວ; ໃຫ້ພະວິຊິດນະລົງໄປຕັ້ງທັບຢູ່ບ້ານ ທ່ຽຄັບແຄ ເພື່ອປິດທາງບໍ່ໃຫ້ກອງທັບທະຫານຢູ່ວຽງຈັນ ຍົກມາຊ່ວຍໄດ້. ເມື່ອໄດ້ແຈ້ງໜ້າທີ່ກັນຮຽບຮ້ອຍແລ້ວ ກອງທັບສະຫຍາມ ຈຶ່ງພ້ອມກັນໂຈມຕີຄ້າຍລາວໃນທຸກບ່ອນ.

ກອງທັບລາວທຸກກອງ ໄດ້ພ້ອມກັນຕໍ່ສູ້ຢ່າງແຂງແຮງ, ໄດ້ຍິງໜ້າໄມ້, ປືນໄຟ ອອກໃສ່ ທະຫານສະຫຍາມ ເຮັດໃຫ້ພວກເຂົາລົ້ມຕາຍຢ່າງຫລວງຫລາຍສົມຄວນ. ແຕ່ຍ້ອນອຳນາດປືນ ໃຫຍ່ນ້ອຍທີ່ທັນສະໄໝ ທີ່ພວກສະຫຍາມຊອກຊື້ມາຈາກນາຍທຶນຕາເວັນຕົກ ຈຶ່ງໄດ້ປຽບກອງ ທັບລາວ ແລະ ຈຶ່ງຕີຄ້າຍລາວແຕກ ແຕກທຸກບ່ອນ.

- ກອງທັບສະຫຍາມ ເຂົ້າຕີເມືອງວຽງຈັນ:

ເຈົ້າ ອະນຸວົງ ເມື່ອຮູ້ຂ່າວວ່າຄ້າຍໃຫຍ່ ພູເຂົ້າສານ ແຕກເສຍຫາຍຢ່າງໜັກໜ່ວງ ແລະ ກອງທັບສະຫຍາມພວມມຸ້ງໜ້າມາຕີວຽງຈັນ ຈຶ່ງຈຳເປັນຕ້ອງອົບພະຍົບຄອບຄົວອອກຈາກ ວຽງ ຈັນ ເມື່ອເດືອນ 6 ແຮມ 6 ຄ่ຳ (1827). ຫລັງຈາກ ເຈົ້າ ອະນຸວົງ ພ້ອມຍາດພີ່ນ້ອງອົບພະຍົບ ໜີໄປ ເມືອງ ອານາມ ໄດ້ສອງວັນ ກອງທັບສະຫຍາມ ກອງໜ້າຈຶ່ງເຂົ້າມາວຽງຈັນໄດ້. ເຈົ້າ ອະ ນຸວົງ ທຳຢ່າງນີ້ ກໍເພື່ອບໍ່ຢາກໃຫ້ເກີດເສິກຢູ່ກາງເມືອງວຽງຈັນ. ອັນຈະເຮັດໃຫ້ຕົວເມືອງຖືກເຜົາ ຜານທຳລາຍ. ອີກຢ່າງໜຶ່ງການອົບພະຍົບພ້ອມດ້ວຍຄອບຄົວຄັ້ງນີ້ ກໍແມ່ນເພື່ອໄປກຽມສ້າງທີ່ ໝັ້ນໃໝ່ ໄວ້ເຮັດສົງຄາມແບບຍາວນານ ຕ້ານພວກສະຫຍາມຕໍ່ໄປ. ກ່ອນຈະອອກຈາກວຽງຈັນ ເຈົ້າ ອະນຸວົງ ກໍໄດ້ສັ່ງໃຫ້ຂຸກເຊື່ອງຊ້າງມ້າອາວຸດສິ່ງຂອງທີ່ສຳຄັນຕ່າງໆ ເທົ່າທີ່ຈະເຮັດໄດ້. ບັນ ດາລູກຫລານ ທີ່ອົບພະຍົບໄປນຳ ເຈົ້າ ອະນຸ ກໍມີເຈົ້າ ສຸດທິສານ, ເຈົ້າ ລາຊະວົງ, ເຈົ້າ ໄຊຍະ ສານ, ເຈົ້າ ເຖ້ຶອນ, ເຈົ້າ ເສືອ, ເຈົ້າ ຊ້າງ, ເຈົ້າ ແໜ້ມ, ເຈົ້າ ຂີ່ເຫີນ, ເຈົ້າ ອົ່ງຄຳ, ເຈົ້າ ຂັດຕິຍະ, ເຈົ້າ ພຸດທະລາດ, ເຈົ້າ ດີສະວົງ, ເຈົ້າ ໜູຈັນ, ເຈົ້າ ສຸພັນ, ລວມລູກຊາຍ 12 ຄົນ ແລະ ລູກຍິງ ພ້ອມດ້ວຍລູກນ້ອຍໆ ຈຳນວນຫລາຍຄົນ ລວມທັງສະໜົມກຳນັນທີ່ສຳຄັນຫລາຍຄົນ ແລະ ລູກ ເຈົ້າ ອຸປະຣາດ ອີກ 5 ຄົນ ຄື: ເຈົ້າ ເອຍ, ເຈົ້າ ອັ່ງ, ເຈົ້າ ປານ, ເຈົ້າ ພົມ ແລະ ແມ່ຂອງເຈົ້າ ອຸ ປະຣາດ ນຳດ້ວຍ. ນອກນີ້ຍັງມີບັນດາພີ່ນ້ອງອື່ນໆ ຕະຫລອດທັງຂຸນນາງ ປະຊາຊົນ ໄປນຳຢ່າງ ຫລວງຫລາຍ. ພວກເພິ່ນໄດ້ລົງເຮືອໃຫຍ່ 11 ລຳ ລ່ອງຕາມລຳຂອງ ຂຶ້ນໄປໃສ່ເມືອງ ມະຫາ ໄຊກອງແກ້ວ, ນອກຈາກຄອບຄົວຂອງ ເຈົ້າ ອະນຸວົງ ແລະ ປະຊາຊົນ ຈາກວຽງຈັນ, ແລ້ວຍັງມີ ຄອບຄົວຈາກ ນະຄອນພະນົມ ຂ້າມໄປນຳເຈົ້າ ອະນຸວົງ ຈົນວ່າເມືອງນີ້ ກາຍເປັນເມືອງຮ້າງ.

ເມື່ອກອງທັບໜ້າຂອງສະຫຍາມ ໂດຍກົມໝື່ນ ທັງ 2(ນະເລດໂຍທິ, ເສນບໍລິລັກ) ເປັນ ແມ່ທັບໄລ່ຕາມທະຫານລາວ ທີ່ແຕກຈາກຄ້າຍ ພູເຂົ້າສານ ມາຮອດ ບ້ານ ພັນພ້າວ ແລ້ວກໍຈຶ່ງ ຮູ້ວ່າ ເຈົ້າ ອະນຸວົງ ອົບພະຍົບອອກຈາກ ເມືອງ ວຽງຈັນ ແລ້ວພວກເຂົາຈຶ່ງຍົກກອງທັບຂ້າມແມ່ ນ້ຳຂອງ ມາຢຶດນະຄອນຫລວງວຽງຈັນ ແລະ ລາຍງານໃຫ້ກົມ ພະລາຊະວັງບໍ່ອອນ ຍົກທັບໜຸນ ຈາກພູເຂົ້າສານ ມາບ້ານ ພັນພ້າວ, ແຕ່ແມ່ທັບສະຫຍາມມາຮອດ ບ້ານ ພັນພ້າວ ແລ້ວກໍບໍ່ກ້າ ຂ້າມມາວຽງຈັນ ດ້ວຍຕົນເອງຍ້ອນຢ້ານຖືກກົນລວງຂອງ ເຈົ້າ ອະນຸວົງ ແຕ່ແມ່ທັບສະຫຍາມ

ໄດ້ສັ່ງການໃຫ້ທະຫານຂອງຕົນຂ້າມມາຝັ່ງວຽງຈັນ ທ່ຽວເກັບກວາດເອົາເຂົ້າຂອງ, ຊັບສົມບັດ ຕ່າງໆ ໃນເມືອງໝົດກ້ຽງ ແລ້ວໃຫ້ທະຫານຕັດ ແລະ ຈູດຕົ້ນໄມ້ທີ່ໃຫ້ໝາກຜົນຈົນໝົດ, ທັງໃຫ້ ເຜົາຕີວເມືອງໃຫຍ່ ແລະ ມ້າງເພກຳແພງເມືອງ ລົງໃຫ້ໝົດກ້ຽງ ແລ້ວກວາດຕ້ອນເອົາ ປະຊາ ຊົນລາວລົງໄປ ບາງກອກ ເປັນຊຸດໆ ພ້ອມທັງຂອກຄົ້ນເອົາສິ່ງຂອງທີ່ມີຄ່າຕ່າງໆ ເຊັ່ນ: ພະໄສ, ພະສຸກ, ພະແຊກຄຳ, ພະແກ່ນຈັນ, ພະສັ່ງນ້ຳ, ພະເງິນຫລໍ່, ພະເງິນບຸ, ເຈ້ົາ ນັນສົ້ມມໍ, ພະນາກ ສະຫວາດ, ພະນາກປົກສິລາ ແລະ ໃຫ້ກໍ່ເຈດີປາບວຽງໄວ້ ຢູ່ຄ້າຍຫລວງ ບ້ານ ພັນພ້າວ (ເໜືອ ວັດ) ແລ້ວຈາລຶກວ່າ: " ເຈດີປາບວຽງ ແລະ ຄວາມຊົ່ວຮ້າຍຂອງອ້າຍອະນຸ " ໄວ້ໃນແຜ່ນສິລາ.

ບັນດາກອງທັບລາວ ຈາກຫົວເມືອງຕ່າງໆ ເຊັ່ນ: ກອງທັບເມືອງ ຊຽງໃໝ່, ເມືອງ ແພ່, ເມືອງ ນ່ານ, ລຳພູນ, ລຳປາງ ແລະ ເມືອງ ຫລວງພະບາງ ທີ່ຖືກເກນມາຊ່ວຍ ຊຶ່ງບາງເມືອງກໍ ຖືກສະຫຍາມເກນມາຊ່ວຍ ຊຶ່ງມີກຳລັງພົນ ຮອດ 30.000 ຄົນນັ້ນ ເມື່ອຍົກທັບມາຮອດເຂດ ຊາຍແດນຂອງວຽງຈັນ ແລ້ວກໍລໍຖ້າຟັງເບິ່ງເຫດການກ່ອນເປັນເວລາດົນນານ " ຄອຍທ່ວງທ່າ ໄຫວພິບທຳເປັນສອງເງື່ອນຢູ່ທຸກເມືອງ..." ເມື່ອຮູ້ວ່າສົງຄາມ ປະກາດເອກະລາດ ປະສົບຄວາມ ປະລາໄຊ ຫລັງຈາກກອງທັບສະຫຍາມ ຕີຄ້າຍໃຫຍ່ຂອງລາວແຕກ ແລະ ຢຶດ ນະຄອນຫລວງ ວຽງຈັນໄດ້ ແລະ ເຈ້ົາ ອະນຸວົງ ກໍອົບພະຍົບໜີຄືແນວນັ້ນ ບັນດາກອງທັບເຫລົ່ານີ້ ຈຶ່ງຕ້ອງຂໍ ຍອມຕໍ່ກອງທັບໃຫຍ່ຂອງສະຫຍາມຢູ່ ບ້ານ ພັນພ້າວ. ສ່ວນເຈ້ົາ ອຸປະຣາດຕິດສະ ທີ່ຕັ້ງທັບຢູ່ ເມືອງ ໜອງຫານ ເພື່ອຕໍ່ສູ້ກັບ ພະຍາ ລາຊະສຸພາວະດີ ນັ້ນເມື່ອເຫັນວ່າກອງທັບຕົນປະລາໄຊ ເຈ້ົາ ອະນຸວົງ ກໍອົບພະຍົບໜີ ແລະ ກອງທັບຫົວເມືອງຝ່າຍເໜືອ ກໍເຂົ້າມາຍອມຕໍ່ແມ່ທັບສະ ຫຍາມຢູ່ ບ້ານ ພັນພ້າວ ແລ້ວ ຈຶ່ງໄດ້ເຂົ້າຍອມຕໍ່ແມ່ທັບໃຫຍ່ສະຫຍາມ ຢູ່ບ້ານດົ່ງກ່າວ ເພື່ອ ຫລຸດໂທດ. ດັ່ງນັ້ນ ແມ່ທັບສະຫຍາມຈຶ່ງໃຫ້ແມ່ທັບລາວຝ່າຍເໜືອ ແລະ ເຈ້ົາ ອຸປະຣາດ ກົມນ້ຳ ສາບານຕົວ ແລ້ວພວກເຂົາກໍລົງໂທດ ໂດຍບໍ່ໃຫ້ຍົກທັບຄືນ ແລະ ສວຍໃຊ້ຄົນພວກນີ້ໄປກວາດ ຕ້ອນເອົາ ປະຊາຊົນລາວ ທີ່ແຕກໜີຈາກບ້ານເມືອງນັ້ນກັບຄືນມາ, ພ້ອມທັງບັງຄັບໃຫ້ຕາມຈັບ ເຈ້ົາ ອະນຸວົງ, ເຈ້ົາ ສຸດທິສານ, ເຈ້ົາ ລາຊະວົງ... ຄືນມາໃຫ້ໄດ້ ແລະ ຖ້າບໍ່ໄດ້ ກໍຢ່າໃຫ້ເປັນສ້ຽນ ໜາມອີກຕໍ່ໄປ. ສ່ວນເຈ້ົາ ມັນທາຕຸລາດ ຫລວງພະບາງ ເມື່ອເຫັນການປະລາໄຊຂອງ ເຈ້ົາ ອະ ນຸວົງ ແລະ ເຫັນກອງທັບຫົວເມືອງຕ່າງໆ ເຂົ້າຍອມຕໍ່ແມ່ທັບສະຫຍາມ ແລ້ວຈຶ່ງໄດ້ມີ ແຈ້ງການ ໄປລາຍງານຕໍ່ ບາງກອກ ເມື່ອວັນສຸກ ແຮມ 13 ຄ່ຳ ເດືອນ 7 ປີ ກຸນ ນົບພະສັກ ປີ 1826 ໂດຍ ໃຫ້ ເຈ້ົາ ເສີມ ແລະ ເຈ້ົາ ຊົມພູ ຖືລົງໄປ. ເນື້ອໃນຂອງການລາຍງານແມ່ນເລົ່າຄືນສະພາບການ ເຄື່ອນໄຫວຂອງ ເຈ້ົາ ອະນຸວົງ ເວລາຢູ່ ຫລວງພະບາງ ແຕ່ເດືອນ 3 ຂຶ້ນ 5 ຄ່ຳ (1826) ໂດຍ ຫວັງໃຫ້ມີການຜ່ອນໂທດ ແລະ ມີຜົນປະໂຫຍດສ່ວນຕົວ.

ຫລັງຈາກ ນະຄອນຫລວງວຽງຈັນ ຖືກທຳລາຍ ແລະ ແມ່ທັບລາວຫລາຍກອງຍອມຈຳນົນຕໍ່ສະຫຍາມແລ້ວ ກໍຍັງມີແມ່ທັບລາວອີກຫລາຍກອງທີ່ບໍ່ຍອມຈຳນົນ ແລະ ຍັງສືບຕໍ່ ຕໍ່ສູ້ອີກຕໍ່ໄປຈົນສຸດຄວາມສາມາດ ເຊັ່ນ: ກອງທັບ ພະຍາ ຊຽງສາ ແລະ ກອງທັບ ເຈົ້າ ລາຊະບຸດໂຍ້, ທະຫານລາວ ພາຍໃຕ້ການບັນຊາຂອງສອງແມ່ທັບນີ້ ຍັງສືບຕໍ່ຕັ້ງຄ້າຍ ແລະ ກຽມພ້ອມປ້ອງກັນຢ່າງແຂງແຮງຢູ່ ບ້ານ ໂພນຊຽງຫວ້ງ; ດ້ວຍເຫດນັ້ນ ແມ່ທັບສະຫຍາມຢູ່ ບ້ານ ພັນພ້າວ ຈຶ່ງ ແຕ່ງໃຫ້ ພະຍາ ໄກໂກລາ ຍົກທັບໄປຕີ ພະຍາ ຊຽງສາ, ພະຍາ ຊຽງສາ ຕີກັບກອງທັບຂອງສະຫຍາມ ນຳໂດຍ ພະຍາ ໄກໂກລາ ແຕກສະຫລາຍ ເຮັດໃຫ້ພວກເຂົາເສຍໄພ່ພົນຈຳນວນຫລວງຫລາຍ ແລະ ເສຍແມ່ທັບອີກຫລາຍຄົນ; ພະຍາ ໄກໂກລາ ເມື່ອລອດຕາຍໄດ້ແລ້ວ ກໍກັບໄປ ບ້ານ ພັນພ້າວ ເພື່ອເຂົ້າລາຍງານຕໍ່ກົມ ພະລາຊະວັງບໍ່ວອນ ຊຶ່ງສະແດງເຖິງຄວາມໂກດແຄ້ນ ແລະ ສັ່ງໃຫ້ລົງໂທດຜູ້ກ່ຽວ ໂດຍຖອນອອກຈາກຕຳແໜ່ງ ແລ້ວໃສ່ໂສ້ລ່າມມັດໄວ້ ໃນຄ້າຍຫຼວງ ແລ້ວຈຶ່ງສັ່ງໃຫ້ກອງທັບຂອງ ພະຍາ ເພັດພິໄຊ, ພະຍາ ກະເສດ, ພະຍາ ສະດາເຮືອງ ຄຸມທະຫານ 1.000 ຄົນ ຍົກທັບມາຕີກອງທັບ ພະຍາ ຊຽງສາ.

ໃນການຮົບຄາວນີ້ ພວກທະຫານສະຫຍາມ ຂີ່ມ້າໃຊ້ປືນສັ້ນຍິງໃສ່ ທ້າວ ໂສມ ນາຍທັບຂອງພະຍາ ຊຽງສາ ເຮັດໃຫ້ຜູ້ກ່ຽວຕາຍໃນທີ່ຮົບ ແລ້ວພວກເຂົາກໍໃຊ້ປືນສັ້ນໄລ່ຍິງຜູ້ອື່ນໆ ອີກ ເຮັດໃຫ້ທະຫານລາວຖືກບາດເຈັບ ແລະ ລົ້ມຕາຍຈຳນວນຫລວງຫລາຍ ແລ້ວພາກັນແຕກຜ່າຍໜີໄປເມືອງ ເພັ້ງ.

ໃນເວລານີ້ ພະຍາ ກອງຄຳ ທີ່ຄຸມທະຫານໄປຕັ້ງຢູ່ ເມືອງ ເພັ້ງ ຈຶ່ງຍົກທັບມາຊ່ວຍ ພະຍາ ຊຽງສາ ໂດຍເຄື່ອນທັບມາຕີຕັດຫລັງກອງທັບສະຫຍາມ ແລະ ຂ້າທະຫານຂອງພວກເຂົາຕາຍຢ່າງຫລວງຫລາຍ. ພະຍາ ເພັດພິໄຊ ເຫັນດັ່ງນັ້ນ ຈຶ່ງສັ່ງໃຫ້ທະຫານທີ່ຖືປືນສັ້ນບຸກຍິງແມ່ທັບລາວ ນາຍສະຫວ່າງ ຫລານຂອງ ພະຍາ ເພັດພິໄຊ ໃຊ້ປືນສັ້ນໄລ່ຍິງ ພະຍາ ກອງຄຳ ແມ່ທັບຂອງລາວ ຈົນຕາຍກາງສະໜາມຮົບ; ເມື່ອກອງທັບຂອງ ພະຍາ ກອງຄຳ ແຕກແລ້ວ ກອງທັບສະຫຍາມ ກໍໄລ່ຕີກອງທັບຂອງ ພະຍາ ຊຽງສາ ຈົນໄປທັນທີ່ທ້ອຍຫລວງ ແລ້ວຮົບກັນກາງປ່າ. ໃນການຮົບກັນຄາວນີ້ກອງທະຫານລາວ ສາມາດຂ້າພະອິນທະລະເດດ ຕາຍກາງສະໜາມຮົບ ແລະ ເຮັດໃຫ້ ພະຍາ ກຳແພງເພັດ, ພະຍາ ລືໄທ ບາດເຈັບໜັກ ແຕ່ຍ້ອນຝ່າຍສະຫຍາມ ມີອາວຸດທັນສະໄໝກວ່າ ກອງທັບລາວຈຶ່ງແຕກອີກ ແລະ ຖືກກອງທັບສະຫຍາມໄລ່ຕາມໄປຕື່ມ. ພະຍາ ຊຽງສາ ປົບໜີໄປຕາມຮີມຂອງ ພ້ອມດ້ວຍມີທະຫານຕິດຕາມໄປນຳພຽງເລັກນ້ອຍ ກໍໄດ້ໄປຖືກກອງທັບໃຫຍ່ຂອງ ພະຍາ ສຸພາວະດີ ຈັບໄດ້ຢູ່ຍະໂສທອນ ແລະ ເພີ່ນໄດ້ຍອມຈຳນົນຕໍ່ ພະຍາ ລາຊະສຸພາວະດີ ຢູ່ທີ່ນັ້ນ.

ໃນເວລາທີ່ກອງທັບ ຂອງພະຍາ ລາຊະສຸພາວະດີ ຕັ້ງຄ້າຍຢູ່ ເມືອງ ຍະໂສທອນ ແລະ ກະກຽມຈະໄປຕີ ເມືອງ ຈຳປາສັກ ໂດຍມີ ເຈົ້າ ຮຸ່ຍ ຍອມເຂົ້າຮ່ວມນຳນັ້ນ ເຈົ້າ ລາຊະບຸດໂຢ້ ເຈົ້ານະຄອນຈຳປາສັກ ທີ່ຕັ້ງຄ້າຍຢູ່ ເມືອງ ສີສະເກດ ຫລັງຈາກໄດ້ຮູ້ແນວນັ້ນ ຈຶ່ງຍົກກອງທັບໃຫຍ່ມາຕັ້ງຢູ່ ເມືອງ ອຸບົນ ແລ້ວສັ່ງໃຫ້ ເຈົ້າ ສຸວັນ ຜູ້ນ້ອງຄຸມກອງທັບມາຕັ້ງຄ້າຍຮັບຢູ່ໃກ້ເມືອງ ຍະໂສທອນ ແລ້ວຮົບກັບກອງທັບສະຫຍາມຢູ່ເມືອງດັ່ງກ່າວ. ທະຫານຂອງເຈົ້າ ປານ, ເຈົ້າ ສຸວັນ ຖືກປືນຂອງສະຫຍາມລົ້ມຕາຍຫລາຍ, ຈາກນັ້ນ ພະຍາ ລາຊະສຸພາວະດີ ກໍຍົກໄປຕີກອງທັບຂອງເຈົ້າ ລາຊະບຸດໂຢ້ ຢູ່ເມືອງ ອຸບົນ ແຕກອີກ. ເຈົ້າ ລາຊາບຸດໂຢ້ ໄດ້ແຕກພ່າຍໄປ ເມືອງ ຈຳປາສັກ ແລະ ໄດ້ ຖືກກອງທັບ ພະຍາ ລາຊະສຸພາວະດີ ຕາມຕີຕະຫລອດທາງ; ເຈົ້າ ລາຊະບຸດ ທີ່ມີທະຫານເຫລືອພຽງເລັກນ້ອຍ, ຈຶ່ງພ້ອມກັນກັບເຈົ້າ ປານ, ເຈົ້າ ສຸວັນ, ລວມທັງໝົດ 30 - 40 ຄົນ, ລົງເຮືອຂ້າມຂອງ ເພື່ອຈະໄປຫາ ເຈົ້າ ອະນຸວົງ ຢູ່ເມືອງ ມະຫາໄຊ ແຕ່ຖືກກອງທັບທະຫານສະຫຍາມໄລ່ຕາມ ເຈົ້າ ລາຊະບຸດ, ເຈົ້າ ປານ, ເຈົ້າ ສຸວັນ, ເຈົ້ານາງ ບັນຖອນ (ເມຍ ເຈົ້າ ລາຊະບຸດ) ແລະ ຄອບຄົວ ເຈົ້າ ລາຊະບຸດ ລວມ 36 ຄົນ ກໍຖືກຈັບ ແລະ ຖືກໃສ່ກົ໊ງຂັງລົງໄປບາງກອກ.

ພະຍາ ລາຊາສຸພາວະດີ ໄດ້ແຕ່ງຕັ້ງໃຫ້ ພະຍາ ຈັກກາ ຄຸມທະຫານ 1.500 ຄົນ ຢູ່ຮັກສາ ເມືອງ ຈຳປາສັກ ແລ້ວເຂົາກໍຍົກກອງທັບມາຕັ້ງຢູ່ ນະຄອນພະນົມ ເພື່ອຄອຍຕິດຕາມຈັບ ເຈົ້າ ອະນຸວົງ, ຕະຫລອດຮອດລູກຫລານ, ທະຫານ ແລະ ປະຊາຊົນລາວ ຜູ້ຮັກຊາດອື່ນໆ.

ເຈົ້າ ອະນຸວົງ ໄດ້ສ້າງເຂດທີ່ໝັ້ນຢູ່ ເມືອງ ມະຫາໄຊກອງແກ້ວ ແລະ ນຳພາຂະບວນອົບພະຍົບໄປຢູ່ ເມືອງ ມະຫາໄຊກອງແກ້ວ ໂດຍສະເພາະ ແມ່ນປະຊາຊົນຈຳນວນຫລວງຫລາຍ ຈາກວຽງຈັນ ແລະ ນະຄອນພະນົມ, ທີ່ຍັງເຫລືອນັ້ນກໍອົບພະຍົບເຂົ້າປ່າ ແລະ ໄປບ່ອນອື່ນຈົນ ເຮັດໃຫ້ເມືອງວຽງຈັນ ແລະ ນະຄອນພະນົມ ເປັນເມືອງຮ້າງ. ພໍໄປຮອດ ເມືອງ ມະຫາໄຊກອງ ແກ້ວ ເພິ່ນໄດ້ນຳພາປະຊາຊົນ ສ້າງເຂດທີ່ໝັ້ນຂຶ້ນຢູ່ບ້ານປ່າມັນ ໂດຍໃຫ້ປະຊາຊົນນະຄອນພະ ນົມ ເປັນຜູ້ກໍ່ສ້າງຄ້າຍ ແລະ ກຳແພງເມືອງ ກຽມຕໍ່ສູ້ຕ້ານກອງທັບສະຫຍາມ. ນອກນັ້ນ ປະຊາ ຊົນ ຢູ່ເມືອງ ຕາມພອງ, ເມືອງ ຊຽງຮົ່ມ, ເມືອງ ເຊໂປນ ແລະ ອື່ນໆ ກໍເຂົ້າມາຊ່ວຍກັນສ້າງເປັນ ຢ່າງດີ.

ເຈົ້າ ອະນຸວົງ ໄດ້ສົ່ງໜັງສືລາຍງານໄປໃຫ້ເຈົ້າແຂວງ ເງອານ ຄື: ທຽງມ - ຄວາ - ຮາວ ເພື່ອຂໍກຳລັງຈາກເຈົ້າຊີວິດ ອານາມ ມາຊ່ວຍ. ຈົດໝາຍນີ້ມີເນື້ອຄວາມວ່າ: " ໃນບາງປີມໍ່ໆ ນີ້, ເຈົ້າຊີວິດສະຫຍາມ ໄດ້ບຸກໂຈມຕີຮອດເຂດ ນະຄອນພະນົມ ຂົ່ງຂຶ້ນກັບລ້ານຊ້າງ ແລ້ວຈັບເອົາ ປະຊາຊົນໄປບາງກອກ, ເຈົ້າຊີວິດລ້ານຊ້າງລົງໄປ ບາງກອກ ຂໍເອົາປະຊາຊົນ ທີ່ຖືກຈັບກັບຄືນ ມາ, ຕໍ່ມາເຈົ້າຊີວິດລ້ານຊ້າງ ໄດ້ພາລູກຂອງຕົນ ຄື: ເຈົ້າ ສຸດທິສານ ພ້ອມກັບພວກພ້ອງອື່ນໆ

ໄປຮ່ວມປຶ້ງສົບຢູ່ບາງກອກ, ຕອນຂາກັບໄດ້ເດີນທາງຜ່ານໂຄລາດ, ຂອນແກ່ນ, ປະຊາຊົນເຂດ ນີ້ ພ້ອມກັບປະຊາຊົນທີ່ຖືກບັງຄັບໄປຢູ່ສະຫຍາມໃນປີກ່ອນໆ ໄດ້ຂໍກັບຄືນມາມໍ, ສະນັ້ນ ກອງ ທັບສະຫຍາມ ຈຶ່ງໄລ່ນໍາຕີເຈົ້າຊີວິດລ້ານຊ້າງ ແລະ ຈັບເອົາປະຊາຊົນຄືນ, ຂ້າຈຶ່ງສັ່ງໃຫ້ ເຈົ້າ ສຸດທິສານ ຢູ່ເພື່ອຕ້ານຄືນສ່ວນຕົວເອງ ກໍຟ້າວກັບຄືນມາ ວຽງຈັນ ກອງທັບສະຫຍາມ ກໍໄລ່ນໍາ ຈົນຮອດ ເມືອງ ໜອງບົວ ແລະ ຮອດວຽງຈັນ ເມື່ອເຫັນວ່າສູ້ບໍ່ໄດ້ ຈຶ່ງອົບພະຍົບມາອາໄສຢູ່ ເຂດຕາມດອງ ແລະ ຂໍຄວາມຊ່ວຍເຫລືອ ຈາກເຈົ້າຊີວິດອານາມ".

ຝ່າຍອານາມ ເມື່ອຮູ້ສະພາບ ແລະ ໄດ້ຮັບຄໍາຂໍຮ້ອງຈາກລ້ານຊ້າງ ຄືແນວນັ້ນ ຈຶ່ງໄດ້ປຶກ ສາຫາລືກັບເສນາອາມາດຄົນສໍາຄັນ ລວມທັງ 29 ຄົນ ເຊັ່ນ: ເຈີນວັນນັ້ງ, ຕົ້ງມຸກເຢືອງ, ຟາມ ວັນທຸຍ, ເຈີນດົ້ງລອງ, ເຈີນວັນເກືອງ, ຫງວຽນວັນຊວນ, ຄວາມວັນເຈືອງ... ແລະ ມີຄວາມເຫັນ ຂັດແຍ້ງກັນຫລາຍຢ່າງ ແຕ່ໃນທີ່ສຸດກໍເອົາຄວາມເຫັນ ທີ່ວ່າ: ອານາຈັກລ້ານຊ້າງ ແຕ່ກ່ອນຈົນ ມາຮອດບັດນີ້ ແມ່ນປະເທດບໍລິວານ ຂອງພວກເຮົາເຂົາເຈົ້າ ໄດ້ສົ່ງມອບເຄື່ອງເພັດແກ້ວ ແລະ ເຄື່ອງບັນນາການເປັນປົກກະຕິ, ສ່ວນສະຫຍາມ ແມ່ນປະເທດໃກ້ຄຽງກັບ ອານາມ ບໍ່ມີຫຍັງອາ ຄາດບາດໝາງກັນ ເຮົາຈຶ່ງບໍ່ຄວນປະເທດນີ້ ແລະ ເອົາປະເທດນັ້ນ. ແຕ່ເມື່ອສະຫຍາມ ກໍ່ເສິກ ຂຶ້ນ ເຮັດໃຫ້ລ້ານຊ້າງຕົກຢູ່ໃນສະພາບຈົນຕາແຈ ແລ້ວມາຂໍຂຶ້ນກັບເຮົາ ພວກເຮົາຈະປະຕິເສດ ບໍ່ໄດ້, ຄວນຊ່ວຍເຫລືອປະເທດນີ້ ແລະ ມັນກໍກ່ຽວຂ້ອງເຖິງວຽກງານ ເຂດຊາຍແດນລະຫວ່າງ ກັນໂດຍສະເພາະ ເງອານ ແມ່ນເຂດແດນທີ່ສໍາຄັນ, ເຮົາຕ້ອງລະມັດລະວັງ ຕິດຕາມເບິ່ງການ ຜັນແປຂອງສະພາບການ ເຮົາຄວນແຕ່ງກອງທັບໄປເຂດດັ່ງກ່າວ ເພື່ອປ້ອງກັນຊາຍແດນ ບໍ່ໃຫ້ ກອງທະຫານສະຫຍາມລ່ວງເກີນ. ຖ້າວ່າສະຫຍາມ ກ້າວເຂົ້າມາລ່ວງລໍ້າເຂດຕາມດອງ - ຄົ້ງ ມານ ເພື່ອໂຈມຕີ ແລະ ຈັບຄົນລ້ານຊ້າງ ກໍໝາຍຄວາມວ່າ ພວກເຂົາລ່ວງລະເມີດເຂດຊາຍ ແດນຂອງພວກເຮົາ. ເຮົາຕ້ອງລົງໂທດ ແລະ ຕີພວກເຂົາໃຫ້ຖອຍອອກຈາກເຂດຊາຍແດນຂອງ ພວກເຮົາ. ເຮັດດັ່ງນີ້ລ້ານຊ້າງ ກໍຈະຮັບຮູ້ວ່າພວກເຮົາ ໄດ້ຊ່ວຍປ້ອງກັນແລ້ວ.

ເມື່ອປຶກສາຫາລືກັນແລ້ວ ເຈົ້າ ອານາມ ຈຶ່ງສັ່ງໃຫ້ທະຫານ ປະຈໍາຢູ່ຊາຍແດນ ຈໍານວນ 20.000 ຄົນ ເຂົ້າມາບາງຕົວເມືອງໃນລາວ ເຊັ່ນ: ຄໍາເກີດ, ຄໍາມ່ວນ... ການສົ່ງທະຫານມາປະ ຈໍາຄືແນວນີ້ ບໍ່ແມ່ນການຊ່ວຍເຫລືອ ເຈົ້າ ອະນຸວົງ ຕີສະຫຍາມ ໃຫ້ອອກຈາກດິນລາວ, ແຕ່ ແມ່ນການຢຶດຄອງລາວທັງນັ້ນ ໃນບາງສ່ວນທີ່ຢູ່ໃກ້ເຂດຊາຍແດນລາວ - ຫວຽດນາມ ເຊັ່ນ: ຄໍາ ເກີດ, ຄໍາມ່ວນ, ເມືອງ ພວນ ແມ່ນບໍ່ໃຫ້ສະຫຍາມມາລ່ວງລໍ້າເຂົ້າໄປໄດ້.

ແມ່ທັບໃຫຍ່ ອານາມ ທີ່ມີຊື່ວ່າ ອົງສັດຕະກຸນດຽນຍີມ ໄດ້ສົ່ງອົງກິນເລືອກແມ່ທັບໜ້າຖື ໜັງສືຈາກ ເງອານ ມາຫາພະຍາ ລາຊະສຸພາວະດີ ຢູ່ນະຄອນພະນົມ ເພື່ອໃຫ້ແຈ້ງຕໍ່ແມ່ທັບ

ໃຫຍ່ສະຫຍາມຢູ່ ບ້ານ ພັນພ້າວ, ໜັງສືນັ້ນແປອອກມີໃຈຄວາມວ່າ: ເມືອງວຽງຈັນ ກັບກຸງອະຍຸທະຍາ ເປັນບ້ານພີ່ບ້ານນ້ອງກັນມາແຕ່ດຶກນານ ປຽບເໝືອນຮີບສິບກັບແຂ້ວ ເຫດໃດສະຫຍາມຈຶ່ງຍົກກອງທັບຂຶ້ນມາທຳລາຍເຜົ່າຜານ ເມືອງວຽງຈັນ ຈົນພົນລະເມືອງແຕກຕື່ນ ປົບໜີຈາກບ້ານເມືອງທີ່ເຄີຍອາໄສ ຢູ່ຢ່າງເປັນສຸກມາດຶກນານແລ້ວ ແລະ ເມືອງວຽງຈັນ ກໍເປັນແດນອານາມ, ດຽວນີ້ແມ່ທັບໃຫຍ່ ຂ້າພະເຈົ້າຄຸ້ມຄອງກອງທັບບົກ 20.000 ຄົນ ມາຕັ້ງຢູ່ ເມືອງ ຕ່ານ ດອງ ຈຶ່ງມີໜັງສືແຈ້ງໃຫ້ ທ່ານຍົກທັບກັບແດນຂອງທ່ານ ແລະ ຖ້າທ່ານກວາດເອົາຄອບຄົວ ວຽງຈັນ ເທົ່າໃດກໍໃຫ້ສົ່ງຄືນມາ ເຮັດດັ່ງນີ້ທາງໄມຕີຈິດຈະໄດ້ຍືນຍາວຕໍ່ໄປ. ຖ້າທ່ານບໍ່ຟັງຂ້າພະເຈົ້າ ກໍເລືອກແມ່ທັບໃຫຍ່ຍົກມາເຖິງແລ້ວ ກໍຈະຮູ້ກັນພຽງແຕ່ຫຍ້າຕົ້ນໜຶ່ງ ກໍບໍ່ໃຫ້ເຫລືອໄວ້. ເຈົ້າພະຍາ ລາຊະ ສຸພາວະດີ ໄດ້ຮັບໜັງສືນີ້ແລ້ວ ກໍຟ້າວເດີນທາງອອກຈາກ ນະຄອນພະນົມ ມາຫາທັບຫລວງຢູ່ ບ້ານ ພັນພ້າວ ເພື່ອຂໍຄຳຕອບຈາກແມ່ທັບໃຫຍ່.

ກ່ອນຈະອອກມາຈາກ ນະຄອນພະນົມ ພະຍາ ລາຊະສຸພາວະດີ ໄດ້ຈັດການປ້ອງກັນຕີວເມືອງ ນະຄອນພະນົມ ແລະ ເມືອງ ຍະໂສທອນ ຢ່າງເຂັ້ມແຂງ, ເວລາອອກເດີນທາງມາຫາ ບ້ານ ພັນພ້າວ ນັ້ນ ພະຍາ ວິເສດສົງຄາມລາມາພັກດີ ກໍໄດ້ຈ້າງວານທະຫານເອີລົບ ນັກຍິງປືນໃຫຍ່ 200 ຄົນ ເປັນກອງນຳພາທາງ.

ພໍມາພົບແມ່ທັບໃຫຍ່ຢູ່ ບ້ານ ພັນພ້າວ ແລ້ວພະຍາ ລາຊະສຸພາວະດີ ກໍໄດ້ເລົ່າເຫດການຕ່າງໆ ສູ່ແມ່ທັບໃຫຍ່ຟັງ, ໂດຍສະເພາະ ແມ່ນໄດ້ເລົ່າຄວາມເປັນໄປໄດ້ ທີ່ຕົນສາມາດດຳເນີນກົນອຸບາຍເກັ້ຍກ່ອມໃຫ້ ເຈົ້າ ອຸປະຣາດ ຍອມຈຳນົນພ້ອມທັງໄດ້ຍຶ່ນໜັງສືຂອງແມ່ທັບໃຫຍ່ ອານາມ ໃຫ້ແມ່ທັບໃຫຍ່ສະຫຍາມ ທີ່ໄດ້ເວົ້າອອກເວລາຕໍ່ມາວ່າ ໃນແຜ່ນດິນລາວ ວຽງຈັນ ນັ້ນ ຖ້າຜູ້ໃດເປັນໃຫຍ່ແລ້ວຈິດໃຈມັກເປັນພານ, ຄິດຮ້າຍ, ເປັນກະບົດຕໍ່ບາງກອກ ທຸກເທື່ອຕັ້ງແຕ່ຄັ້ງ ເຈົ້າ ຕາກສິນ ໃນສະໄໝພຸດທະເຈົ້າຫລວງ 2 ຄັ້ງ (ລັດຊະການ ທີ 1) ສະໄໝ ພະບໍລົມມະໂກດ (ລັດຊະການ ທີ 2) ນັ້ນບໍ່ມີຫວັງ ຍ້ອນມີບັນຫາ ຫລວງພະບາງ ຈຶ່ງເປັນກະບົດບໍ່ໄດ້ມາຮອດແຜ່ນດິນປະຈຸບັນນີ້ (ລັດຊະການ ທີ 3). ເຈົ້າ ອະນຸວົງ ມີສັກດາອານຸພາບຫລາຍ ເປັນທີ່ຢຳເກງກົວຂອງຫົວເມືອງລາວ ເຂົາຂໍຄ້າຂາຍກັບອານາມ ເພາະມີຂໍ້ສະດວກຫລາຍກວ່າມາຫາທາງ ບາງກອກ, ເກືອ ແລະ ເຄື່ອງໃຊ້ສອຍກໍໄດ້ມາຈາກອານາມ. ດັ່ງນັ້ນ ຈຶ່ງແຕ່ງເຄື່ອງບັນນາການໄປໃຫ້ອານາມ ທີ່ເມືອງ ເວ້ ເປັນປະຈຳ ແລະ ອານາມ ຈຶ່ງຖືວ່າວຽງຈັນ ເປັນເຂດແດນຂອງຕົນດ້ວຍ; ອານາມ ມີໜັງສືມາໝິ່ນປະໝາດສະຫຍາມ ຄືແນວນີ້ ຍ້ອນເຈົ້າ ອະນຸວົງ ເປັນຕົ້ນເຫດ, ເຂົາຢາກຈະຢຶດຄອງລາວຕະຫລອດໄປ ໂດຍບໍ່ໃຫ້ມີຜູ້ຄອບຄອງ ເມືອງ ວຽງຈັນ ຕໍ່ໄປ, ຕ້ອງທຳລາຍບ້ານເມືອງເສຍໃຫ້ໝົດ ໃຫ້ເປັນດົງ ເປັນປ່າ ບໍ່ໃຫ້ ນະຄອນຫລວງໃຫຍ່ ສືບຕໍ່ໄປໄດ້. ແຕ່ວ່າເລື່ອງທັງໝົດນີ້ ເຮົາຕ້ອງນຳໄປຂໍຄວາມເຫັນ ຈາກເຈົ້າຊີວິດຂອງເຮົາສາກ່ອນ ".

ກົມພະລາຊະວັງບໍ່ອອມ ໄດ້ມອບອຳນາດໃຫ້ ພະຍາ ລາຊະສຸພາວະດີ ແລະ ແມ່ທັບຄົນ ອື່ນໆ ຢູ່ຈັດການປ້ອງກັນເມືອງລາວຕໍ່ໄປ ໂດຍສະເພາະ ໄດ້ສັ່ງໃຫ້ ພະຍາ ເພັດຊະບຸນ ຂົນປືນ ນົກສັບຄາບສີລາ 1500 ກະບອກ ແລະ ກະສຸນດິນດຳ ສົ່ງໄປເພີ່ມຕື່ມໃຫ້ຢູ່ ນະຄອນພະນົມ ຢ່າງພຽງພໍ ພ້ອມທັງສັ່ງໃຫ້ຕິດຕາມກວາດຕ້ອນເອົາປະຊາຊົນ ລົງໄປທາງ ບາງກອກ ເປັນຊຸດໆ ແລະ ໃຫ້ຊອກຫາມູນມໍລະດົກຕ່າງໆ ຂອງລາວທີ່ປະຊາຊົນລາວ ນຳໄປເຊື່ອງຊ້ອນໄວ້ນັ້ນ ເອົາ ລົງໄປທາງ ບາງກອກ ໃຫ້ໝົດລວມທັງ ພະບາງ ນຳ ແລ້ວກົມພະລາຊະວັງບໍ່ອອມ ກໍກັບບາງ ກອກ ໃນວັນພະຫັດ ເດືອນ 8 ຂຶ້ນ 9 ຄ่ຳ (1827) ພ້ອມທັງຂະບວນເຄື່ອງຂອງອັນມີຄ่າຈາກ ວຽງຈັນ ແລະ ກວາດຕ້ອນປະຊາຊົນໄປທາງ ບາງກອກ ຢ่າງຫລວງຫລາຍ.

ເວລາກອງທັບສະຫຍາມ ຍົກຂຶ້ນໄປເມືອງວຽງຈັນ ຄັ້ງນັ້ນ ນາຍ ແລະ ພົນທະຫານ ຂອງ ພວກເຂົາໄດ້ລົ້ມຕາຍຢ่າງຫລວງຫລາຍ, ຕາຍດ້ວຍການສູ້ຮົບ ແລະ ຕາຍດ້ວຍອາວຸດຂ้າເສິກ ນັ້ນມີໜ້ອຍ. ແຕ່ຕາຍດ້ວຍພະຍາດປ່ວຍ ແລະ ຕາຍດ້ວຍພະຍາດໄຂ້ປ่າໄຂ້ພິດ ແລະ ຕາຍ ດ້ວຍອຶດຢາກນັ້ນມີຫລາຍ.

ຫລັງຈາກ ແມ່ທັບໃຫຍ່ກັບຄົນ ບາງກອກ ແລ້ວ, ພະຍາ ລາຊະສຸພາວະດີ ກໍໄດ້ຕັ້ງຄ້າຍ ຢູ່ທ่າຊົມ ໃກ້ບ້ານ ພັນພ້າວ ແລ້ວໃຫ້ ພະຍາ ລາຊະວະລົນ (ປ້ອມ), ໂດຍມີເຈົ້າ ອຸປະຣາດ ແລະ ພະຍາ ຊຽງສາ ເປັນຜູ້ນຳພາທາງ ນຳກຳລັງໄປກວາດຕ້ອນເອົາຄອບຄົວລາວ ມາໄວ້ທີ່ ບ້ານ ພັນພ້າວ ແລະ ແບ่ງຄອບຄົວຈຳນວນໜຶ่ງຢູ່ຮັກສາ ເມືອງວຽງຈັນ ໂດຍໃຫ້ ເພຍ ເມືອງວຽງ ຈັນ ເປັນຜູ້ຮັບຜິດຊອບ, ສ่ວນຄອບຄົວຈຳນວນຫລວງຫລາຍນັ້ນ ໄດ້ຈັດໃຫ້ນາຍທັບນາຍກອງ ກວາດຕ້ອນລົງໄປ ບາງກອກ ເປັນລຳດັບຕ่ເນື່ອງກັນ ແລະ ໄປຫລາຍທາງ.

ພະຍາ ລາຊາສຸພາວະດີ ໄດ້ສືບຕ่ຕາມຫາ ພະບາງ ແລະ ໄດ້ໄປພົ້ຢູ່ຖ້ຳເຂົາແກ້ວ ຊຶ่ງ ແມ่ນປະຊາຊົນລາວ ໄດ້ເອົາໜີໄປຊຸກເຊື່ອງໄວ້, ຫລັງຈາກໄດ້ ພະບາງ ແລ້ວພະຍາ ລາຊະສຸ ພາວະດີ ໄດ້ກວາດຕ້ອນເອົາ ປະຊາຊົນລາວ ແລະ ມູນມໍລະດົກຕ່າງໆ ລວມທັງ ພະບາງ ລົງໄປ ບາງກອກ ຢ่າງເປັນຂະບວນ ໃນຕົ້ນປີ 1828. ເມື່ອລົງໄປຮອດ ບາງກອກ ແລ້ວ ໄດ້ຖືກເຈົ້າຊີ ວິດສະຫຍາມ ສັ່ງໃຫ້ກັບຄືນວຽງຈັນອີກ ເພື່ອຕາມຈັບ ເຈົ້າ ອະນຸວົງ ແລະ ຄະນະໃຫ້ໄດ້ ທັງສັ່ງ ໃຫ້ທຳລາຍ ນະຄອນຫລວງວຽງຈັນ ໃຫ້ຮາບກ້ຽງຢ่າໃຫ້ມີເຫລືອໄວ້ ແລະ ໃຫ້ກວາດຕ້ອນເອົາ ປະຊາຊົນລາວໄປ ບາງກອກ ໃຫ້ໝົດກ້ຽງ ເຮັດໃຫ້ເມືອງວຽງຈັນ ເປັນป่າດົງ ບ่ໃຫ້ເປັນເມືອງຕ่ ໄປອີກ.

ໃນເວລາທີ່ກອງທັບພະຍາ ລາຊະສຸພາວະດີ ໄດ້ຍົກທັບຂຶ້ນມາວຽງຈັນອີກ ໃນເດືອນ 7 ປີ 1828 ນັ້ນ, ພໍຮອດເມືອງ ໜອງບົວລຳພູ ເຂົາໄດ້ແต่ງໃຫ້ ພະຍາ ລາດຮອງເມືອງ, ພະຍາ ພິໄຊ

ສົງຄາມ, ພະຍາ ທຸກຂະລາດ, ຫລວງສຸເລນທະວິຊິດ 4 ຄົນ ເປັນແມ່ທັບໜ້າຄຸມທະຫານ 1.000 ຄົນ ຍົກຂຶ້ນມາ ບ້ານ ພັນພ້າວ ກ່ອນ, ພໍຮອດ ບ້ານ ພັນພ້າວ, ພະຍາ ລາດຮອງເມືອງ ໄດ້ແຕ່ງຕັ້ງໃຫ້ ໝື່ນເທບພັກດີ ຄຸມທະຫານ 10 ຄົນ ຂ້າມຂອງມາຫາ ເພຍໜ້າ ເພື່ອປຶກສາລາຊະການ; ໝື່ນພັກດີ ກັບທະຫານ 7 ຄົນ ຂຶ້ນມາວຽງຈັນ ສ່ວນທະຫານ ອີກ 3 ຄົນ ບໍ່ກ້າເຂົ້າມາວຽງຈັນ ຍ້ອນເຫັນວ່າ ປະຊາຊົນຖືອາວຸດຢູ່ແລ້ວ ກັບຄືນໄປລາຍງານໃຫ້ພະຍາລາດຮອງເມືອງ, ພະຍາ ລາດຮອງເມືອງ ຈຶ່ງແຕ່ງຕັ້ງໃຫ້ ພະຍາ ພິໄຊສົງຄາມ, ພະຍາ ທຸກຂະລາດ, ຫລວງສຸເລນທະວິຊິດ ກັບທະຫານ 300 ຄົນ ຂ້າມມາຝັ່ງວຽງຈັນ ແລ້ວຕັ້ງທັບຢູ່ວັດກາງ.

ໃນເວລານີ້ ສັກດິນາອາມາມ ໄດ້ແຕ່ງຕັ້ງໃຫ້ຂຸນນາງ ອາມາມ ເປັນລາຊະທູດຄຸມທະຫານ ຈຳນວນ 80 ກວ່າຄົນ ມາສົ່ງເຈົ້າ ອະນຸວົງ ແລະ ຄະນະເຂົ້າມາວຽງຈັນ, ພ້ອມກັນນີ້ ເລໂປ ເສນາບໍດີ ຝ່າຍຕ່າງປະເທດ ຂອງເມືອງ ເວ້ ໄດ້ແຕ່ງຕັ້ງໃຫ້ ອົງເລວັນຮີ ແລະ ອົງໂດຍລຳຍົງ ເປັນລາຊະທູດຖືສານລົງໄປ ບາງກອກ ທາງທະເລ ເພື່ອຂໍໂທດໃຫ້ ເຈົ້າ ອະນຸວົງ ດ້ວຍ. ໃນເດືອນ 8 ແຮມ 1 ຄ່ຳ ເຈົ້າ ອະນຸວົງ ແລະ ຄະນະມາຮອດທ່າຂ້າມຊ້າງ (ຍັງອີກ 4 ຄືນ ຈະຮອດ ວຽງຈັນ) ແລ້ວເຈົ້າ ລາຊະວົງ ໄດ້ແຕ່ງຕັ້ງໃຫ້ຄົນຖືໜັງສືມາສົ່ງໃຫ້ເພຍເມືອງຈັນ, ເພຍເມືອງ ຊ້າຍ ເພື່ອສັ່ງໃຫ້ຈັດທີ່ທາງເຮືອນ ເຍົ້າຮິ່ມເງົາໃຫ້ສົມຄວນ ເປັນບ່ອນພັກອາໄສຂອງ ເຈົ້ານາຍທີ່ ຈະຢູ່ຫົວເມືອງເດີ່ມ.

ຝ່າຍເພຍເມືອງຈັນ, ເພຍເມືອງຊ້າຍ, ເພຍໜ້າ ຈຶ່ງໄດ້ນຳໜັງສື ເຈົ້າ ລາຊະວົງ ສົ່ງໃຫ້ພະຍາ ພິໄຊສົງຄາມ, ພະຍາ ພິໄຊສົງຄາມ ຈຶ່ງໃຫ້ຄົນນຳໜັງສືໄປລາຍງານດ່ວນຕໍ່ ພະຍາ ລາຊະສຸພາວະດີ ຢູ່ໜອງບົວລຳພູ; ເມື່ອຮູ້ວ່າເຈົ້າ ອະນຸວົງ ຈະເຂົ້າມາວຽງຈັນ ພະຍາ ລາຊະສຸພາວະດີ ຈຶ່ງຮີບຟ້າວຍົກທັບຈາກ ໜອງບົວລຳພູ ມາບ້ານ ພັນພ້າວ ໃນເດືອນ 8 ແຮມ 5 ຄ່ຳ. ຕໍ່ມາເດືອນ 8 ແຮມ 6 ຄ່ຳ ເຈົ້າ ອະນຸວົງ, ເຈົ້າ ລາຊະວົງ ກໍຍົກກອງທັບມາເຖິງວຽງຈັນ ມີທະຫານ 2.600 ຄົນ ມານຳ, ມີທະຫານອາມາມ ພຽງແຕ່ 82 ຄົນ, ນາຍທະຫານອາມາມ 2 ຄົນ ຜູ້ແປພາສາ 2 ຄົນ ແລະ ເຈົ້າລາວທີ່ເປັນຫົວເມືອງຂຶ້ນຂອງອາມາມ 4 ຄົນ, ທະຫານເມືອງບີ 200 ຄົນ. ມາຮອດ ວຽງຈັນ ແລ້ວ ຝ່າຍອາມາມ ໄດ້ເຂົ້າມາແຈ້ງຕໍ່ ພະຍາ ພິໄຊສົງຄາມ ແລະ ຄະນະວ່າ: " ພວກຕົນແມ່ນແມ່ທັບອາມາມ ຊຶ່ງໄດ້ຮັບຄຳສັ່ງຈາກເຈົ້າຊີວິດອາມາມ ທີ່ເມືອງ ເວ້ ໃຫ້ພາ ເຈົ້າ ອະນຸວົງ ແລະ ຄະນະມາອ່ອນນ້ອມຍອມຕໍ່ແມ່ທັບສະຫຍາມໂດຍດີ ແລະ ນຳເອົາ ເຈົ້າ ອະນຸວົງ ລົງໄປ ບາງກອກ ເພື່ອຂໍໂທດນຳເຈົ້າຊີວິດສະຫຍາມ ". ແມ່ທັບອາມາມ ຍັງໄດ້ແຈ້ງໃຫ້ແມ່ທັບ ສະຫຍາມຮູ້ອີກວ່າ: " ເຈົ້າຊີວິດອາມາມໄດ້ແຕ່ງລາຊະທູດ ນຳໜັງສືລົງໄປເຮືອທະເລເຂົ້າ ບາງ ກອກ ແລ້ວເພື່ອ ຂໍໂທດໃຫ້ ເຈົ້າ ອະນຸວົງ " .

ເຈົ້າ ອະນຸວົງ ເປັນນັກຮົບຜູ້ກ້າຫານ ເພິ່ນຈົ່ງບໍ່ພໍໃຈຕໍ່ນະໂຍບາຍຂອງອາມາມ ທີ່ຈະໃຫ້ຕົນລົງໄປຍອມຈຳນົນ ແລະ ຮັບໂທດຢູ່ບາງກອກ, ດັ່ງນັ້ນ ເພິ່ນຈົ່ງຕັດສິນໃຈນຳພາປະຊາຊົນລາວ ຕໍ່ສູ້ຕ້ານສະຫຍາມໃຫ້ເຖິງທີ່ສຸດ, ພາຍຫລັງສືບຮູ້ສະພາບກອງທັບສະຫຍາມໝົດແລ້ວ ໃນເດືອນ 8 ແຮມ 7 ຄ່ຳ ປີ 1827 ເວລາບ່າຍ 4 ໂມງ ເຈົ້າ ອະນຸວົງ ກຳນຳພາທະຫານເຂົ້າລ້ອມຄ້າຍທະຫານສະຫຍາມຢູ່ວັດກາງ ຊຶ່ງເວລາດຽວກັນນັ້ນ ກອງທັບຂອງ ພະຍາ ລາຊະສຸພາວະດີ ພວມຍົກມາເຖິງບ້ານ ພັນພ້າວ, ທະຫານລາວໄດ້ຂ້າ ທະຫານສະຫຍາມ ໃນຄ້າຍຕາຍໝົດ ແມ່ທັບສະຫຍາມ ທັງ 3 ຄົນ ກໍຖືກຂ້າຕາຍຄາສະໜາມຮົບຄື: ພະຍາ ພິໄຊສົງຄາມ, ພະຍາ ທຸກຂະລາດ, ຫຼວງສຸເລນທະລະວິຊິດ, ສ່ວນທະຫານຈຳນວນໜຶ່ງ ທີ່ອອກນອກຄ້າຍນັ້ນ ບໍ່ກ້າເຂົ້າຊ່ວຍກັນ, ໄດ້ພາກັນແລ່ນລົງຂອງ ເພື່ອຂ້າມຟາກແຕ່ພັດບໍ່ມີເຮືອຈົ່ງລອຍຂ້າມແຕ່ກໍຖືກທະຫານລາວພາຍເຮືອໄລ່ຟັນຕາຍລົງນ້ຳ ລວມທະຫານສະຫຍາມ ຕາຍ 400 ກວ່າຄົນ, ຜູ້ທີ່ຂ້າມໄປໄດ້ຈຳນວນ 45 ຄົນ ໄດ້ໄປແຈ້ງສະພາບຕໍ່ພະລາຊະສຸພາວະດີ ແມ່ທັບໃຫຍ່ທີ່ພວມມາຮອດ ບ້ານ ພັນພ້າວ. ເມື່ອພະຍາ ລາຊະສຸພາວະດີ ໄດ້ເຫັນທະຫານລາວ ໄລ່ຟັນແທງທະຫານສະຫຍາມກາງຫາດ, ກາງນ້ຳດ້ວຍຕາຕົນເອງຄືແນວນັ້ນຈົ່ງຢ້ານຕາຍ, ໂດຍສະເພາະ ກອງທະຫານ ເມືອງ ໂຄລາດ ແລະ ຫົວເມືອງລາວອື່ນໆ ທີ່ຖືກເກນມາພໍເຫັນແນວນັ້ນ ຈົ່ງພາກັນແຕກໜີໄປໝົດ. ເຈົ້າ ພະຍາ ລາຊະສຸພາວະດີ ບໍ່ມີທາງສູ້ທະຫານລາວໄດ້ ຈົ່ງຖອຍໄປ ເມືອງ ຍະໂສທອນ ໂດຍໃຫ້ ພະຍາ ຊຽງສາ ພາໄປເພາະ ເມືອງ ຍະໂສທອນ ມີເຂົ້າປາອາຫານອຸດົມສົມບູນ ແລະ ໃກ້ກວ່າຈະໄປໂຄລາດ. ກອງທັບສະຫຍາມໄດ້ຮົບຟ້າວປົບຕາຍລັດປ່າໄປ ຍະໂສທອນ ໃນແລງມື້ນັ້ນ. ແມ່ທັບສະຫຍາມ ມີຄວາມໂກດແຄ້ນ ໃຫ້ທະຫານລາວຫົວເມືອງຂຶ້ນ ທີ່ແຕກໜີແລ້ວນັ້ນ. ຈົ່ງສັ່ງໃຫ້ຂຸນຮອງ ຈ່າເມືອງ ນຳກຳລັງໄປເມືອງ ນະຄອນລາຊະສີມາ ເພື່ອຕິດຕາມຈັບທະຫານທີ່ແຕກໜີໃຫ້ຄົບຕາມບັນຊີ ແລະ ໃຫ້ໃສ່ໂສ້ໄວ້ທຸກຄົນທັງປັບໃໝ່ຢ່າງໜັກອີກ. ສ່ວນແມ່ທັບອາມາມ ເມື່ອເຫັນເຫດການແນວນັ້ນ ກໍພາກັນກັບຄືນ ເມືອງ ເງ່ອານ ເພື່ອລາຍງານໃຫ້ແມ່ທັບໃຫຍ່ຂອງຕົນ.

ໃນຕອນແລງມື້ນັ້ນ, ເຈົ້າ ລາຊາວົງ ໄດ້ຕັດຫົວແມ່ທັບສະຫຍາມ ທັງ 3 ຄົນ ທີ່ຕາຍຄາສະໜາມຮົບນັ້ນ ໄປລຽມໄວ້ຫາດຊາຍ ແຄມຂອງໜ້າວັດກາງ ແລ້ວຕິດຕາມຈັບທະຫານສະຫຍາມທີ່ຍັງລີ້ຢູ່ຕາມທີ່ຕ່າງໆ ນັ້ນມາຈົນໝົດ ລວມທະຫານສະຫຍາມຕາຍ ທັງໝົດ 600 ກວ່າຄົນ, ນອກນັ້ນ ເຈົ້າ ລາຊະວົງ ເກັບໄດ້ປືນນ້ອຍນິກສັນຄາຍສີລາ 500 ກະບອກ, ໄດ້ປືນແບບຫາມ - ແລ່ນຂານິກຍາງ 20 ກະບອກ, ແລ້ວເພິ່ນໄດ້ສັ່ງໃຫ້ ພະຍາ ສຸໂພ, ພະຍາ ຊຽງຂວາ, ພະຍາ ຊຽງຊ້າຍ ໄປປ່າວຮ້ອງເອົາປະຊາຊົນທີ່ຍັງລີ້ຢູ່ຕາມປ່າດົງ ໃຫ້ມາຮ່ວມກັນຕີສະຫຍາມອີກເທື່ອໃໝ່, ປະກົດວ່າມີຄົນອອກມາຮັບໃຊ້ຊາດ ອີກເຖິງ 10.000 ຄົນ ແລະ ຄັດເລືອກເອົາຜູ້ຊະກັນໄດ້ 4 -

5 ພັນຄົນ ເຂົ້າເປັນທະຫານແລ້ວ ເຈົ້າ ລາຊະວົງ ກໍສັ່ງໃຫ້ເພຍມະນີ ແລະ ທິນມະຫາໄຊ ຄຸມ ພົນ 300 ຄົນ ຂ້າມໄປທີ່ ບ້ານ ພັນພ້າວ ຮີ້ເຈດີ ປາບວຽງຈັນກ້ຽງ ແຕ່ຍອດຮອດຖານແລ້ວນຳ ພະພຸດທະຮູບທີ່ພວກສະຫຍາມລັກຈາກວຽງຈັນໄປ ຄື: ພະເສີມ, ພະແສງ, ພະສຸກ, ພະໄສ ທັງ 4 ອົງ ກັບມາໄວ້ ເມືອງວຽງຈັນ ຄືເກົ່າ. ເຈົ້າ ລາຊະວົງ ກຳນຳພາທະຫານ ຊອກອາວຸດຕາມທີ່ ຕ່າງໆ ທີ່ສິງໄສວ່າພວກສະຫຍາມຈະນຳມາຊຸກເຊື່ອງ ແຕ່ກໍຫາບໍ່ພໍ ຍ້ອນວ່າພວກເຂົາຖິ້ມລົງ ນ້ຳຂອງ ໃນບ່ອນທີ່ສອກຫລີກ.



ຮູບຈິນຕະນາການສະແດງເຖິງ ເຈົ້າ ອະນຸວົງ ບັນຊາທະຫານ ຍຶດເອົາເມືອງ ວຽງຈັນ ຄືນມາໃນປີ 1827

ເຈົ້າ ອະນຸວົງ ໄດ້ສັ່ງໃຫ້ ເຈົ້າ ສຸດທິສານ ຄຸມພົນທະຫານລາວເກົ່າ 2.000 ຄົນ ແລະ ທະ ຫານລາວໃໝ່ 2.000 ຄົນ ຍົກໄປຮຽກຮ້ອງປະຊາຊົນລາວ ຕາມຫົວເມືອງລາວຕ່າງໆ ໃຫ້ມາ ຮ່ວມກັນເປັນກອງທັບ ເພື່ອຈະຕາມຕີສະຫຍາມ.

ເມື່ອເຈົ້າ ອະນຸວົງ ປັບປຸງກອງທັບລາວຄືນໃໝ່ ໄດ້ຈຳນວນໜຶ່ງແລ້ວ ເພີ່ນຈຶ່ງຈັດກອງທັບ ລົງໄປຂັບໄລ່ສະຫຍາມ ອອກຈາກແຜ່ນດິນລາວ ຕາມ 3 ທາງ ຄື: ໃຫ້ເຈົ້າ ສຸດທິສານ ຄຸມພົນ 3.000 ຄົນ ລ່ອງໄປຕາມນ້ຳຂອງ ແລ້ວຮຽກຮ້ອງເອົາປະຊາຊົນເຂົ້າກອງທັບຕື່ມ ເພື່ອຕີກອງທັບ ສະຫຍາມຢູ່ ນະຄອນພະນົມ ແລະ ໃຫ້ຍົກທັບໄປຕີຢູ່ ໂຄລາດ ແລ້ວໃຫ້ຕັ້ງດ່ານຢູ່ທັ້ນ; ໃຫ້ ເຈົ້າ ລາຊະວົງ ເປັນແມ່ທັບໃຫຍ່ມີແສນທ້າວພະຍາລາວ ນາຍທັບນາຍກອງເປັນປີກຂວາ ແລະ ປີກ ຊ້າຍ ຈຳນວນ 6.000 ຄົນ ຍົກຂ້າມຂອງໄປຕີກອງທັບ ພະຍາ ລາຊະສຸພາວະດີ ໃຫ້ອອກຈາກ

ດິນລາວແລ້ວ ໃຫ້ຕັ້ງທັບຮັກສາດ່ານ ເພື່ອຕ້ານສະຫຍາມທີ່ຈະມາຈາກກະບົນບູລີ; ໃຫ້ເຈົ້າ ໜໍ່ ຄຳ, ຄຸ້ມຄອງທັບຫົວເມືອງອັນປະກອບດ້ວຍຄົນ ທີ່ປຸກລະດົມມາໄດ້ 3.000 ຄົນ ແລະ ໃຫ້ຍົກ ທັບຂັບໄລ່ພວກສະຫຍາມອອກຈາກເມືອງ ຫຼົ່ມສັກ, ເມືອງ ເລີຍ, ເມືອງ ເພັດຊະບູນ, ເມືອງ ໄຊ ບາດານ ແລ້ວຕັ້ງທັບຮັກສາດ່ານແຖວນັ້ນໄວ້.

ເມື່ອສົ່ງກອງທັບອອກໄປໝົດແລ້ວ ເຈົ້າອະນຸວົງ ໄດ້ຢູ່ຈັດການປ້ອງກັນເມືອງວຽງຈັນ ໄວ້ ຢ່າງແຂງແຮງ ໂດຍໄດ້ຕັ້ງຄ້າຍຢູ່ນອກເມືອງ 4 ແຈ, ໄດ້ເຮັດກຳແພງເມືອງຂຶ້ນໃໝ່ ໃຫ້ມີປະຕູ ປ້ອມສູ້ຮົບຢູ່ນອກເມືອງໂດຍນຳເອົາໄມ້ໄຜ່ມາປັກເປັນເສົາກຳແພງຈົນຮອບເມືອງແບບຊົ່ວຄາວ.

ເຈົ້າ ອະນຸວົງ ໄດ້ແຕ່ງຕັ້ງ ພະຍາ ລີ ກັບ ເພຍມະຫາໄຊ ໄປຂໍກອງທັບເມືອງ ລີ້, ເມືອງ ເຊີນ ຊຶ່ງແມ່ນລາວ 12 ພັນນາ ຂຶ້ນມາຊ່ວຍ ແລະ ເພີ່ນໄດ້ແຕ່ງທູດລາວ ພາເຈົ້າຫຼານຍິງລາວ ໄປຖວາຍ ເຈົ້າ ອ້ຽວ ເພື່ອຂໍກອງທັບພະມ້າ ມາຊ່ວຍນຳອີກ.

ເຈົ້າ ລາຊະວົງ ຍົກກອງທັບໃຫຍ່ໄປຕາມແມ່ນ້ຳຂອງ ແລະ ຂຶ້ນໄປໃສ່ ຍະໂສທອນ ໂດຍ ບໍ່ພໍ້ກອງທັບຜູ້ກ່ຽວ ແຕ່ສືບຮູ້ວ່າກອງທັບ ພະຍາ ລາຊະສຸພາວະດີ ໄປຕັ້ງທັບຢູ່ ເມືອງ ສຸວັນນະ ພູມ ຈຶ່ງຍົກທັບຕິດຕາມໄປຕີ ເມື່ອໄປເຖິງ ບ້ານ ຕະກຸດ ໃກ້ເມືອງ ສຸວັນນະພູມ ແລະ ສືບຮູ້ວ່າ ກອງທັບສະຫຍາມຕັ້ງໝັ້ນຢູ່ ເມືອງ ສຸວັນນະພູມ ນັ້ນດົນແລ້ວ, ເຈົ້າ ລາຊະວົງ ຈຶ່ງຕັ້ງຄ້າຍໃໝ່ 3 ຄ້າຍຢູ່ ບ້ານ ທົ່ງບົກຫວານ ແລ້ວ ໃຫ້ຫົວໜ້າຄ້າຍ ທັງ 3 ຄື: ພະຍາ ຄຳເກີດ, ກອງແກ້ວ ແລະ ກອງທອງ ຄຸມທະຫານອອກໄປເກນຄົນ ແລະ ສະບຽງອາຫານມາໄວ້ຢ່າງພຽງພໍ, ພ້ອມນັ້ນ ເຈົ້າ ລາຊະວົງ ກໍໃຫ້ ເພຍສາຄອນ ກັບທ້າວ ແສນໃຈຫານ ຄຸມກອງທັບໄປລ່ຽ ປ້ອງກັນກອງທະຫານ ຈາກຄ້າຍຂະເໝນ, ໃຫ້ເຈົ້າ ເພັດເດຊ່ວ ເປັນທູດຖືໜັງສື ພ້ອມເຄື່ອງບັນນາການອັນມີຄຳ ແລະ ເພັດຕ່າງໆ ໄປຖວາຍ ນັກອົງຈັນ ເຈົ້າຊີວິດຂະເໝນ ເພື່ອຂໍກອງທັບ ຂະເໝນ ມາຊ່ວຍຕີສະ ຫຍາມອອກຈາກລາວ (ໃນເວລານັ້ນ ຂະເໝນ ກໍບໍ່ຖືກກັບສະຫຍາມ ຍ້ອນສະຫຍາມຮຸກຮານ ແລະ ຢຶດຄອງ ຂະເໝນ).

ຝ່າຍພະຍາ ລາຊະສຸພາວະດີ ທີ່ຢູ່ໃນຄ້າຍ ເມືອງ ສຸວັນນະພູມ ນັ້ນ, ໄດ້ແຕ່ງຄົນອອກສືບ ຂ່າວທາງເລິກ ໂດຍຈັດເປັນ 3 ກອງ ແລະ ໄປຕາມ 3 ທາງ. ເມື່ອໄດ້ຄວາມຈາກກອງຂອງໝໍ ໂພນໄພ ວ່າ: ກອງທັບລາວ ທີ່ມີກຳລັງພົນຫລາຍ ໄດ້ເຂົ້າຕີຢຶດຄອງ ນະຄອນພະນົມ ໄດ້ແລ້ວ; ກອງຂອງນາຍ ປ່ານຟ້າ ກໍກັບໄປແຈ້ງ ວ່າ: ເຫັນຄ້າຍລາວຕັ້ງຢູ່ທົ່ງບົກຫວານ, ມີ 3 ຄ້າຍ ມີຈຳ ນວນພົນປະມານ 7.000 ຄົນ; ສ່ວນກອງຂອງ ໝານເມືອງ ກໍກັບໄປແຈ້ງ ວ່າ: ເຈົ້າ ສຸດທິສານ, ເຈົ້າ ລາຊະວົງ, ເຈົ້າ ໂອ ທັງ 3 ຄົນ ໄດ້ໄປປຸກລະດົມຄົນເຂົ້າກອງທັບລາວ ໄດ້ເກືອບ 10.000 ຄົນ ແລະ ດຽວນີ້ກໍມີກອງທັບລາວຢູ່ ເມືອງ ສີສະເກດ, ເມືອງ ເດດອຸດອນ ຈັດເປັນ 2 ກອງທັບ

ໃຫຍ່ ແລະ ພວມກຽມລຳລຽງສະບຽງອາຫານໄປໄວ້ຢູ່ ເມືອງ ພູຂຽວ, ກຽມໄປຕີໂຄລາດ, ດຽວນີ້ ປະຊາຊົນລາວ ໃຫ້ການສະໜັບສະໜູນເຈົ້ານາຍລາວຫລາຍ ເພື່ອກອບກູ້ບ້ານເມືອງຄືນໃໝ່.

ພະຍາ ລາຊະສຸພາວະດີ ຮູ້ແນວນັ້ນແລ້ວ ຈຶ່ງຍົກທັບໄປຕີ ທົ່ງບົກຫວານ (ຢູ່ໃນແຂວງ ໜອງຄາຍ) ແລ້ວຕັ້ງຄ້າຍໃກ້ຄ້າຍລາວ ເຖິງ 7 ຄ້າຍ ແລ້ວໃຊ້ກົນອຸບາຍຫລອກລວງ ກອງທັບ ລາວຕ່າງໆນາໆ. ໃນວັນສຸກ ເດືອນ 11 ຂຶ້ນ 10 ຄ່ຳ ພວກເຂົາໄດ້ໃຊ້ກົນອຸບາຍ ໂດຍໃຫ້ ພະຍາ ພິໄຊລະນະລິດ, ພະຍາ ວິຊິດນະ ລົງຄຸມທະຫານ ກອງລະ 500 ຄົນ ໄປສະກັດລັດຕິກອງທັບ ເຈົ້າ ລາຊະວົງ ຕາມຂ້າງທາງໃຫ້ກອງທັບ ເຈົ້າ ອົ້ນ ເປັນກອງທັບມ້າໄວ ມີມ້າ 100 ໂຕ ເປັນ ກອງໜູນ, ໃຫ້ພະຍາ ມະຫາສິງຄາມ ແລະ ພະຍາ ພິໄຊ ເປັນກອງປີກຊ້າຍ ປີກຂວາ 600 ຄົນ, ກອງຂະໜາບຂ້າງ 2 ກອງ 600 ຄົນ ແລະ ກອງຫລອນ ອີກ 500 ຄົນ, ໃຫ້ພະຍາ ສິງຄາມ ນຳ ກອງທະຫານມ້າ ໄປຕີກອງທັບເຈົ້າ ລາຊະວົງ ເພື່ອໃຫ້ກອງທັບເຈົ້າ ລາຊະວົງ ໄລ່ຕາມມາແລ້ວ ຕົກເຂົ້າໃນວົງລ້ອມດັກສະກັດຂອງສະຫຍາມ. ນອກນັ້ນພະຍາ ລາຊະສຸພາວະດີ ຍັງໄດ້ສັ່ງກອງ ທີ 1 ຂອງພະຍາ ລາຊະສິງຄາມ ໄປຕັ້ງຢູ່ປ່າໃກ້ຄ້າຍລາວ ເພື່ອກຽມຕີ ແລະ ເຝົ້າຄ້າຍລາວໃນ ເວລາກອງທັບ ເຈົ້າ ລາຊະວົງ ຕົກຖືກວົງສະກັດ ແລະ ຍັງໃຫ້ພະຍາ ລາດຮອງເມືອງ ເປັນແມ່ ທັບຢູ່ຮັກສາຄ້າຍໃຫຍ່, ໃຫ້ພະຍາ ວິເສດສິງຄາມ ເປັນທັບເລາະລຽບປ່າ, ໃຫ້ພະຍາ ສົມທົບ ເປັນກອງສົ່ງຂ່າວ, ໃຫ້ກອງທັບເມືອງ ສຸວັນນະພູມ ມາເປັນທັບຄອຍຕີຕັດຫລັງ. ນອກຈາກນັ້ນ ແລ້ວ ສະຫຍາມຍັງມີກອງຮັກສາດ່ານນ້ຳຂອງ ແລະ ກອງຕົນອີກດ້ວຍ. ເມື່ອຈັດຽບຮ້ອຍແລ້ວ, ເຈົ້າພະຍາ ລາຊະສຸພາວະດີ ກໍໄດ້ອອກຈາກຄ້າຍໄປກວດກາກາງສະໜາມຮົບ ແລະ ກອງທະ ຫານມ້າ, ຕໍ່ມາກອງທັບສະຫຍາມ ກໍໄດ້ໄປຕີຄ້າຍທະຫານລາວຢູ່ທົ່ງບົກຫວານ. ທະຫານລາວ ນຳໂດຍເຈົ້າ ລາຊະວົງ ໄດ້ອອກມາຕໍ່ສູ້ ແລະ ໄລ່ກອງທັບສະຫຍາມ ຈົນຖືກວົງລ້ອມຂອງເຂົາ ຝ່າຍລາວ ເມື່ອຮູ້ວ່າຕົນຕົກເຂົ້າວົງລ້ອມ ແລະ ກໍພະຍາຍາມຕີແຫກອອກມາ. ເຖິງຈະມີກຳລັງ ພົນໜ້ອຍກວ່າ ແລະ ອາວຸດດ້ອຍກວ່າສະຫຍາມກໍຕາມ ແຕ່ກອງທັບລາວກໍມີຈິດໃຈຕໍ່ສູ້ສຸດຂີດ ເຮັດໃຫ້ສະຫຍາມລົ້ມຕາຍຢ່າງຫຼວງຫລາຍ. ໃນເວລາທີ່ພວມຕໍ່ສູ້ກັນຢ່າງດຸເດືອດນັ້ນ, ເຈົ້າ ລາ ຊະວົງ ໄດ້ຫຼຽວເຫັນແມ່ທັບໃຫຍ່ສະຫຍາມ ຂີ່ມ້າຢູ່ກາງພົນທະຫານ, ເພິ່ນຈຶ່ງຊັກມ້າກົງໄປຫາ ທັນທີຕໍ່ສູ້ກັນຕົວຕໍ່ຕົວ ລະຫວ່າງແມ່ທັບຕໍ່ແມ່ທັບ. ເຈົ້າພະຍາ ລາຊະສຸພາວະດີ ເຫັນເຈົ້າ ລາຊະ ວົງ ມາໃກ້ ຈຶ່ງຊັກມ້າກຽມຖອຍໜີ ຍ້ອນຢ້ານແມ່ທັບລາວ ແຕ່ໜີກໍບໍ່ທັນ ຈຶ່ງຖືກເຈົ້າ ລາຊະວົງ ຂີ່ ມ້າຖືຫອກແທງຖືກເອິກ ເຊາະລົງໄປເຖິງທ້ອງນ້ອຍຈົນຕົກມ້າ ນອນລົ້ມດິ້ນກາງເດີ່ນ, ຮອຍບາດ ແຜຍາວ 8 ນິ້ວ ເລິກເຄິ່ງກະບຽດ, ເລືອດໄຫລຊະ. ເຈົ້າ ລາຊະວົງ ໂດດລົງໄປຊ້ຳຕື່ມ, ຫລວງພິ ພັດ ນ້ອງຊາຍຂອງ ເຈົ້າ ລາຊະສຸພາວະດີ ຖອດດາບອອກມາຊ່ວຍປ້ອງກັນອ້າຍຕົນເອງໄວ້, ເຈົ້າ ລາຊະວົງ ຍົກດາບຝັນຂວາພິພົດຂາດເຄິ່ງ, ພໍດີພວກທະຫານສະຫຍາມ ຍິງປືນສຸ່ມໃສ່ ເຈົ້າ

ລາຊະວົງ ລູກໜຶ່ງຖືກກະດູກສັນຫລັງ ອີກລູກໜຶ່ງຖືກກະໂພກ ເຮັດໃຫ້ເພີ່ນລົ້ມລົງ, ພວກທະຫານລາວ ເຂົ້າໃຈວ່າຕາຍ ກໍເຂົ້າຫາມເອົາເພີ່ນ ແຕ່ພໍເພີ່ນໄດ້ສະຕິ ກໍຂຶ້ນຂີ່ມ້າ ນຳພາກອງທັບລາວ ຕີຜ່າວົງປິດລ້ອມອັນແໜ້ນໜາ ຂອງສະຫຍາມອອກໄປໄດ້. ເມື່ອຄ້າຍໃຫຍ່ຖືກສະຫຍາມຢຶດໄດ້ໝົດ, ແລ້ວເຈົ້າ ລາຊະວົງ ຈຶ່ງຖອຍໜີກັບມາວຽງຈັນ ຍ້ອນມີກຳລັງໜ້ອຍ.

ໃນສົງຄາມຄັ້ງນີ້, ເຖິງວ່າພວກສະຫຍາມມີກຳລັງຫລາຍກວ່າ ແຕ່ກໍເສຍນາຍທັບຄື: ຫຼວງຈະຕຸລົງໂຍທີ, ຫຼວງພິນິດໂຍທາ, ພະພິມບູລີ, ຫຼວງພິພິດ ແລະ ນາຍທັບອື່ນໆອີກ ແລະ ທະຫານທັງສອງຝ່າຍ ກໍຕາຍເປັນຈຳນວນຫຼວງຫລາຍ. ພະຍາ ລາຊະສຸພາວະດີ ແມ່ທັບສະຫຍາມ ຫລັງຈາກປິ່ນປົວບາດແຜແລ້ວ ຈຶ່ງຂຶ້ນຄານຫາມຍົກທັບຕິດຕາມ ເຈົ້າ ລາຊະວົງ ມາຮອດບ້ານ ພັນພ້າວ ແລ້ວກຽມຈັດທັບຕີເຂົ້າວຽງຈັນ.

- ກອງທັບສະຫຍາມ ທຳລາຍຕີວເມືອງວຽງຈັນ.

ເມື່ອເຈົ້າ ລາຊະວົງ ນຳກອງທັບມາຮອດວຽງຈັນ ແລ້ວເພີ່ນໄດ້ເຂົ້າລາຍງານຕໍ່ ເຈົ້າ ອະນຸວົງ, ເຖິງການເຮັດສົງຄາມ ແບບປະເຊີນໜ້າຕົວຕໍ່ຕົວ ກັບແມ່ທັບສະຫຍາມ ແລະ ໄດ້ກ່າວວ່າ: ຮູ້ວ່າກອງທັບສະຫຍາມ ມີກຳລັງຫລວງຫລາຍທີ່ສຸດທັງຈັບພະຍາ ຊຽງສາ ແລະ ພະຍາ ສົງຄາມ ວຽງໄຊ ເປັນໄສ້ເສິກຢູ່ນຳ. ສ່ວນທະຫານຂອງຝ່າຍເຮົາກໍລົ້ມຕາຍ, ຖືກຈັບກຳຫລາຍ ແຕກໜີກຳ ຫລາຍ ຍ້ອນວ່າອາວຸດຂອງຝ່າຍສະຫຍາມເໜືອກວ່າ ແລະ ພວກສະຫຍາມ ກໍພວມຍົກທັບທັງ ໝົດ ເພື່ອຕາມມາຕີວຽງຈັນ.

ເຈົ້າ ອະນຸວົງ ແລະ ເຈົ້າ ລາຊະວົງ ເມື່ອປຶກສາກັນແລ້ວ ກໍສັ່ງໃຫ້ທະຫານເກັບເຄື່ອງຂອງ ທີ່ມີຄ່າທຸກຢ່າງໄປຊຸກເຊື່ອງ ແລະ ເກັບອາວຸດຖິ້ມລົງນ້ຳຂອງ ເທົ່າທີ່ຈະເຮັດທັນ ແລ້ວຈຶ່ງອົບພະຍົບໜີຈາກວຽງຈັນ ໃນເດືອນ 11 ອອກໃໝ່ 11 ຄ่ຳ ປີ 1827 ເວລາຂ້ອນແຈ້ງ. ຕິດຕາມໄປນຳ ເຈົ້າ ອະນຸວົງ, ມີເຈົ້າ ລາຊະວົງ, ເຈົ້າ ເຫມັນ, ເຈົ້າ ຂັດຕິຍະ, ເຈົ້ານາງ ຄຳປ້ອງມະເຫສີ, ເຈົ້ານາງ ຊຽງຄຳ, ເຈົ້ານາງ ບົວ ຊາຍາຂອງເຈົ້າ ລາຊະວົງ, ເຈົ້ານາງ ທອງດີ, ເຈົ້ານາງ ຄຳໄສ, ເຈົ້ານາງ ບຸສະບາ, ເຈົ້ານາງ ຄຳແພງ, ເຈົ້າໜູ ກັບບ່າວໄພ ອີກ 3 ຄົນ. ສ່ວນເຈົ້າ ລາຊະວົງ ນັ້ນ ພໍໄປຮອດທ່າອ້າຍຊ້າງ ຈຶ່ງແຍກທາງກັບເຈົ້າ ອະນຸວົງ, ແລ້ວພ້ອມກັບຊາຍາຂຶ້ນໄປ ເມືອງ ມະຫາໄຊກອງແກ້ວ ເພື່ອໄປຫາຖານທີ່ໝັ້ນຢູ່ບ້ານປ່າມັນ. ໃນຮຸ່ງເຊົ້າຂອງມື້ນັ້ນ ເຈົ້າ ສຸດທິສານ ກຳພາ ຄອບຄົວ ແລະ ຍາດວົງຈຳ ນວນໜຶ່ງອົບພະຍົບຈາກວຽງຈັນໄປອີກ.

ພະຍາ ລາຊະສຸພາວະດີ ໄດ້ຍົກກອງທັບມາຕັ້ງຄ້າຍ ຢູ່ທີ່ຄ້າຍເກົ່າ ບ້ານ ພັນພ້າວ ແລ້ວ ສົ່ງພະຍາ ນະຄອນສະຫວັນ ຍົກພົນ 1.500 ຄົນ ກັບມາຢຶດເອົາວຽງຈັນ ພ້ອມທັງໃຫ້ ພະຍາ ລາຊະສົງຄາມ, ພະຍາ ພິໄຊລະນະລິດ, ພະຍາ ພິຊິດນະ ລົງຄຸມພົນ 3.000 ເປັນກອງໜູນຍົກພົນ

ຂ້າມຢູ່ ທ່າຊ້າງ ຂ້າມທ່າເມືອງ ວຽງຈັນ, ໃຫ້ພະຍາ ສີງຄາມ ຍົກພົນໄປຮັກສາດ່ານຕາເວັນຕົກ, ໃຫ້ພະຍາ ສີງຄາມ ຍົກພົນໄປຮັກສາດ່ານ ທ່າອ້າຍ ເມືອງ ໜອງຄາຍ.

ທະຫານສະຫຍາມເຂົ້າຢຶດເມືອງວຽງຈັນ ໄດ້ແລ້ວພວກເຂົາກໍທ່ຽວປຸ້ນຈີ້, ເກັບກວາດເອົາ ຊັບສົມບັດຕ່າງໆ ໃນຕົວເມືອງ ແລະ ກວາດຕ້ອນເອົາປະຊາຊົນ ທີ່ຍັງເຫລືອຢູ່ນັ້ນໄປລວມກັນ ໄວ້ ແລ້ວຫລວງເສນີ ຄຸມທະຫານ 500 ຄົນ ຢູ່ຮັກສາພວກຄົວວຽງຈັນ; ສ່ວນພະຍານະຄອນສະ ຫວັນ ກໍຍົກທັບອອກຈາກວຽງຈັນ ຕິດຕາມຈັບ ເຈົ້າ ອະນຸວົງ ໄປເຖິງບ້ານ ໃຜ່ໄກ້ ເມືອງ ເພັ້ນ ກໍ ບໍ່ພົບເພິ່ນ ພົບແຕ່ຄອບຄົວເຈົ້ານາຍລາວຈຳນວນໜຶ່ງ; ຈາກນັ້ນ ພະຍານະຄອນສະຫວັນ ຈຶ່ງຈັດ ກອງທະຫານເຂົ້າລ້ອມໄວ້ແລ້ວ ຍົກປືນຫາມແລ່ນຍິງໄປໃສ່, ລູກປືນຕົກໃສ່ໜູ່ເຈົ້ານ້ອງລາວ ຖືກ ເດັກນ້ອຍ ອາຍຸ 11 ປີ ຕາຍຄົນໜຶ່ງ. ຝ່າຍລາວກຽມພາກັນຕໍ່ສູ້ກັບກອງທັບສະຫຍາມ ພ້ອມຊ້າງ ມ້າ ໄດ້ເຂົ້າລ້ອມໄວ້ໂດຍຮອບ ແຕ່ໃນທີ່ສຸດຂະບວນອົບພະຍົບ ກໍຖືກຈັບໄດ້ທີ່ ປາກຫ້ວຍໃຜ່ໃກ້ ເມືອງ ເພັ້ນ ໃນເດືອນ 11 ຂຶ້ນ 15 ຄ່ຳ, ໃນນັ້ນມີເຈົ້າຊາຍ 5 ເຈົ້ານ້ອງ 1 ຄື: ເຈົ້າ ສຸດທິສານ, ເຈົ້າ ເຕ້, ເຈົ້າ ດວງຈັນ, ເຈົ້ານາງ ຄຳວັນ ທັງ 6 ຄົນ ແມ່ນລູກຂອງເຈົ້າ ອະນຸວົງ ແລະ ຫລານເພີ່ນ 1 ຄົນ ຄື: ເຈົ້າ ຫລວດ (ລູກເຈົ້າ ສຸດທິສານ) ພະຊາຍານ້ອຍ ເພີ່ນ 3 ຄົນ ຄື: ນາງ ມາໄລ, ນາງ ວອນ, ນາງ ວັນດີ ຍາດວົງສາ ຂອງເພີ່ນອີກ 3 ຄົນ ຄື: ທ້າວ ພົມມາ, ທ້າວ ເປມປິດາ, ພະຍາ ຊາເດ້ ແລະ ຍັງມີສາວໃຊ້ ແລະ ໄພ່ພົນອື່ນອີກ 43 ຄົນ ພວກສະຫຍາມໄດ້ຈັບບຸກຄົນທັງໝົດ ໃສ່ຄາແລ້ວ ນຳໄປສົ່ງໃຫ້ ພະຍາ ລາຊະສຸພາວະດີ ຢູ່ຄ້າຍ ພັນພ້າວ.

ພະຍາ ລາຊະພາວະດີ ໄດ້ຂ້າມມາທີ່ ວັດຈັນ ແລ້ວສັ່ງການໃຫ້ທະຫານທຳລາຍເຜົາຜານ ຕົວເມືອງວຽງຈັນ ຈົນໝົດສິ້ນ ແລະ ຕິດຕາມກວາດຕ້ອນເອົາຄອບຄົວໄປໄວ້ຢູ່ຄ້າຍ ບ້ານ ພັນ ພ້າວ ເພື່ອກວດໄປ ບາງກອກ ໃຫ້ໝົດສິ້ນ ໃນເດືອນ 12 ເຮັດໃຫ້ເມືອງວຽງຈັນ ເຫລືອແຕ່ດິນ ເປົ່າເປັນຫວ່າງ ຕາມຄຳສັ່ງຂອງເຈົ້າຊີວິດສະຫຍາມ.

ຝ່າຍເຈົ້າ ອານາມ ເມື່ອຮູ້ວ່າ ເຈົ້າ ອະນຸວົງ ໄດ້ເຂົ້າຢຶດວຽງຈັນຄືນ ໂດຍບໍ່ປະຕິບັດຕາມ ຄຳແນະນຳຂອງຕົນ ແລະ ຖືກກອງທັບສະຫຍາມຕາມຈັບເພີ່ນ ຈຶ່ງສົ່ງລາຊະທູດມານະຄອນ ພະນົມ ເພື່ອຂໍເຈລະນາກັບແມ່ທັບສະຫຍາມ ໂດຍມີກາຍ ໂດຍທຸງເປັນຫົວໜ້າ, ດິນຍູດວຽນຫູ ເປັນຜູ້ແປພາສາ ແລະ ທະຫານ 50 ຄົນ. ພໍມາຮອດ ນະຄອນພະນົມ ແລ້ວກໍເຂົ້າພົບກັບນາຍ ທັບສະຫຍາມ 3 ຄົນ ຄື: ພະວິຊິດສົງຄາມຫຼວງນະລາ, ຫລວງຈົງໃຈຢຸດ ເພື່ອຂໍເຈລະຈາກັບແມ່ ທັບໃຫຍ່ຢູ່ ບ້ານ ພັນພ້າວ.

ພະວິຊິດສົງຄາມ ເມື່ອຮູ້ຈຸດປະສົງຂອງຝ່າຍອານາມແລ້ວ ໄດ້ຂຽນໜັງສືສະບັບໜຶ່ງແລ້ວ ມອບໃຫ້ ຂຸນຫານລິດທິລະນະວົງ ນຳໄປສົ່ງໃຫ້ ພະຍາ ລາຊະສຸພາວະດີ, ຕໍ່ມາພະຍາ ລາຊະສຸ

ພາວະດີ ກໍມີໜັງສືຕອບວ່າ: " ຄັ້ງກ່ອນທະຫານສະຫຍາມຕາຍ ເກືອບ700 ຄົນ ຢູ່ວຽງຈັນ ຍ້ອນຫລົງເຊື່ອພວກທະຫານອາມາມ ທີ່ມາສົ່ງ ເຈົ້າ ອະນຸວົງ, ຄັ້ງນີ້ພວກມັນຈະຫລອກຂ້າອີກ, ຈົ່ງກຳຈັດພວກອາມາມ ນັ້ນເສຍ ".

ເມື່ອໄດ້ຮັບຄຳສັ່ງແລ້ວ ນາຍທັບສະຫຍາມ 3 ຄົນ ຈົ່ງວາງແຜນ ສົ່ງທະຫານອາມາມ ທັງໝົດ ໂດຍຫລອກລວງວ່າ: ຈະຈັດງານລ້ຽງ ເປັນການຮັບຮອງສາຍສຳພັນໄມຕີຕໍ່ກັນ. ຝ່າຍອາມາມ ຄິດວ່າຈະເປັນການລ້ຽງຮັບຮອງຢ່າງແທ້ຈິງ ຈົ່ງແຕ່ງທະຫານ 2 ຄົນຢູ່ເຝົ້າເຮືອນ, ນອກນັ້ນພາກັນເຂົ້າໃນຄ້າຍສະຫຍາມທັງໝົດ ເມື່ອນັ່ງລົງໃນເຮືອນຮັບຮອງພ້ອມກັນແລ້ວ, ນາຍທັບສະຫຍາມກໍຮ້ອງສັ່ງໃຫ້ພັກພວກທີ່ກຽມໄວ້ ພ້ອມກັນ ຂ້າທະຫານອາມາມຕາຍເກືອບໝົດ.

* ສັກດິນາສະຫຍາມ ທໍລະມານ ເຈົ້າ ອະນຸວົງ: ໃນເວລາທີ່ເຈົ້າ ອະນຸວົງ ພວມອົບພະຍົບຂຶ້ນໄປທາງ ເມືອງ ພວນ ແລະ ພວກສະຫຍາມພວມແຕ່ງກອງທັບຕົນ ແລະ ກອງທັບຫົວເມືອງໄລ່ຕາມຂຶ້ນໄປທາງເມືອງນັ້ນ ເຈົ້າ ນ້ອຍ ແຫ່ງເມືອງ ພວນ ຊຶ່ງເປັນເມືອງຂຶ້ນຂອງອາມາມ ໃນເວລານັ້ນ ຊຶ່ງມີກອງທະຫານ ອາມາມ ປະຈຳຢູ່ ຈົ່ງແຕ່ງກອງທັບອອກລາດຕາເວນ ເຖິງກັນທຸກດ້ານ ເພື່ອຮັກສາເຂດແດນ ເມືອງ ພວນ ຢ່າງເຄັ່ງຄັດຕາມຄຳສັ່ງຂອງເຈົ້າຊີວິດອາມາມ ທີ່ເມືອງເວ້. ເຈົ້າ ນ້ອຍ ບ່ຍອມປ່ອຍໃຫ້ກອງທັບສະຫຍາມ ລ່ວງລ້ຳເຂດແດນເມືອງຕົນ ຈົ່ງມີໜັງສືແຈ້ງມາຫາແມ່ທັບສະຫຍາມ ຢູ່ວຽງຈັນ ໃນເດືອນ 12 ຂຶ້ນ 12 ຄ່ຳວ່າ: ເມືອງ ພວນ ເປັນເມືອງ ຂຶ້ນຂອງອາມາມ ແຕ່ວ່າມີເຂດແດນຕິດຕໍ່ກັນກັບວຽງຈັນ, ເຈົ້າ ອະນຸວົງ ລຸກຂຶ້ນຕໍ່ສູ້ກັບສະຫຍາມ ແລ້ວໜີໄປໃກ້ ເມືອງ ພວນ, ຂໍຢ່າໃຫ້ກອງທັບສະຫຍາມຍົກຕິດຕາມ ເຈົ້າ ອະນຸວົງ ໄປເຂດແດນເມືອງ ພວນ ເລີຍ ເພາະຝ່າຍປະຊາຊົນພົນລະເມືອງແຕກຕື່ນ, ເມືອງ ພວນ ຈະຈັບເຈົ້າ ອະນຸວົງ ແລະ ຄອບຄົວ ແລ້ວຈະສົ່ງໃຫ້ກອງທັບສະຫຍາມຈະບ່ປ່ອຍໃຫ້ໜີໄປໄດ້ອັນເດັດຂາດ.


ພະຍາ ລາຊະສຸພາວະດີ ມີໜັງສືຕອບວ່າ: " ກອງທັບສະຫຍາມ ບ່ລ່ວງລ້ຳເຂດແດນ ເມືອງ ພວນ ແຕ່ຖ້າເຈົ້າ ນ້ອຍ ເມືອງ ພວນ ຫາກມີກົນອຸບາຍຊ່ວຍ ເຈົ້າ ອະນຸວົງ ໃຫ້ໜີຈາກ ເມືອງ ພວນ ນັ້ນ ກອງທັບສະຫຍາມ ຈຳເປັນຈະຕ້ອງຕິດຕາມຈັບຕົວ ເຈົ້າ ອະນຸວົງ ໃຫ້ໄດ້ແລ້ວ ຈົ່ງຈະກັບ. ແລ້ວສົ່ງໃຫ້ເພຍເມືອງກາງ ກັບ ເພັຍຫົວໄຊ ຖືໜັງສືນີ້ໄປໃຫ້ເຈົ້າ ນ້ອຍ ເມືອງ ພວນ. ໃນເດືອນ 12 ແຮມ 4 ຄ່ຳ ໝວງໄຊ ຍົກຂ້າຫລວງສະຫຍາມ ຖືໜັງສືໄປແຈ້ງ ເມືອງ ນ່ານ, ເມືອງ ລັບແລ ໃຫ້ຍົກທັບມາສົມທົບກັບ ຫລວງພະບາງ ເພື່ອຊ່ວຍກັນຕາມຈັບ ເຈົ້າ ອະນຸວົງ ແລະ ກວາດຕ້ອນເອົາປະຊາຊົນລາວລົງໄປບາງກອກ, ກອງທັບ ເມືອງ ນ່ານ ນຳ ໂດຍໝານຂັດຕິຍະ, ກອງທັບ ເມືອງ ລັບແລ ນຳ ໂດຍພະຍາ ລັບແລ, ກອງທັບ ໝວງພະບາງ ນຳໂດຍທ້າວ ມະຫາພົນ, ລວມພົນລະ 300 - 400 ຄົນ ມາຕາມຈັບ ເຈົ້າ ອະນຸວົງ ຢູ່ເຂດ ເມືອງ ພວນ.

ພະຍາ ລາຊະສຸພາວະດີ ກໍແຕ່ງໃຫ້ພະຍາ ສູນທອນສົງຄາມ ຄຸມທະຫານສະຫຍາມ 500 ຄົນ ຂຶ້ນໄປຕາມຈັບ ເຈົ້າ ອະນຸວົງ ຈົນໄດ້; ແຕ່ເວລາທີ່ພວມຍົກຂຶ້ນໄປນັ້ນ, ກອງທັບຂອງ ເຈົ້າ ໜານຂັດຕິຍະ, ພະຍາ ລັບແລ ແລະ ທ້າວ ມະຫາພົນ ກໍຈັບ ເຈົ້າ ອະນຸວົງ ແລະ ຄອບຄົວ ຢູ່ໃນ ໄຮ່ຕົ້ນພູ ຊຶ່ງເຈົ້າ ອະນຸວົງ ພັກຢູ່ຫັ້ນ ເພື່ອລໍຖ້າຄອບຄົວທີ່ຕາມມານຳຫລັງ. ເຈົ້າ ອະນຸວົງ ພ້ອມ ດ້ວຍຄອບຄົວ ຈຶ່ງຖືກພວກເຂົາຈັບໃສ່ຄານນຳລົງມາວຽງຈັນ, ມາຮອດຫາດ ເດື່ອຍ ຈຶ່ງພໍ້ກັບກອງ ທັບຂອງ ພະຍາ ສູນທອນສົງຄາມ ຈຶ່ງພາກັນກັບມາວຽງຈັນ. ຜູ້ທີ່ຖືກຈັບຄັ້ງນີ້ມີຄື: ເຈົ້າ ອະນຸວົງ ແລະ ຊາຍາຂອງເພີ່ນ 6 ຄົນ ຄືນາງ ຄຳປ້ອງ, ເຈົ້ານາງ ທອງດີ, ເຈົ້ານາງ ຄຳໄສ, ເຈົ້ານາງ ບຸສະ ບາ, ເຈົ້ານາງ ຄຳເກີດ, ເຈົ້ານາງ ບຸບຜາ, ລູກເຈົ້າ ອະນຸວົງ 3 ຄົນ ຄື: ເຈົ້ານາງ ຄຳແພງ, ເຈົ້ານາງ ໜູນ, ເຈົ້າຊາຍ ໜູນແດງ ແລະ ຫລານສາວເພີ່ນ ອີກ 1 ຄົນ ຊື່ວ່າ ຄຳຜາ, ລວມ 11 ຄົນ ແລະ ບ່າວໄພ່ຊາຍຍິງອີກ 40 ກວ່າຄົນ, ທັງໝົດນີ້ມາຮອດວຽງຈັນ ເມື່ອເດືອນອ້າຍຂຶ້ນ 15 ຄ່ຳ.

ພະຍາ ລາຊະສຸພາວະດີ ໄດ້ສອບຖາມຫາ ເຈົ້າ ລາຊະວົງ ນຳເຈົ້າ ອະນຸວົງ ແລະ ເຈົ້ານາງ ຄຳແພງ ເມື່ອຮູ້ວ່າ ເຈົ້າ ລາຊະວົງ ໄດ້ລົງເຮືອຢູ່ທ່າຊ້າງຂ້າມໄປ ເມືອງ ມະຫາໄຊ ຈຶ່ງໄດ້ ຈັດກອງທັບອອກຫລາຍທາງ ເພື່ອຕາມຈັບຜູ້ກ່ຽວ ດັ່ງນີ້: ໃຫ້ພະຍາ ນະລົງສົງຄາມ, ພະຍາ ພິ ໄຊລະນະລຶດ ຄຸມພົນໄປທາງບົກ, ໃຫ້ພະວິຊິດນະລົງຄຸມພົນໄປທາງເຮືອ, ໃຫ້ພະຍາ ສົງຄາມ, ພະຍາ ອິນທະລະລາດ ຍົກພົນໄປລັດທາງ ເມືອງ ຂະເໝນ, ໃຫ້ ພິມທະລີໄທ ຄຸມທັບເຮືອແຍກ ໄປທາງ ເມືອງ ພິງ ເພື່ອຕາມຈັບ ເຈົ້າ ລາຊະວົງ ໃຫ້ໄດ້.

ເມື່ອເດືອນອ້າຍ ແຮມ 13 ຄ່ຳ ພະຍາ ລາຊະສຸພາວະດີ ສັ່ງໃຫ້ ພະຍາ ອະນຸລັກໂຍທາ, ພະໂຍທາສົງຄາມ, ໜ່ວງເທເພນ, ໜ່ວງພິໄຊເສນາ, ພະຍາ ນະຄອນ ເຈົ້າເມືອງ ຂອນແກ່ນ, ລາ ຊະວົງ ເມືອງ ຊົນນະບົດ, ພະມະຫາດໄທ ເມືອງ ນະຄອນລາຊະສີມາ ລວມເປັນນາຍທັບ 8 ຄົນ ຄຸມພົນກອງລະ 100 ຄົນ ລວມເປັນ 800 ຄົນ, ຄຸມເຈົ້າ ອະນຸວົງ ແລະ ຄອບຄົວລົງໄປ ເມືອງ ສະລະບູລີ. ພະຍາ ພິໄຊວາລີ ທີ່ຕັ້ງຂຶ້ນມາຮັບຢູ່ທີ່ນັ້ນ ຈຶ່ງເຮັດກົງໃສ່ ເຈົ້າ ອະນຸວົງ ແລະ ຂັງ ໄວ້ໃນເຮືອແລ້ວ ກໍໃຫ້ ພະອະນຸລັກໂຍທາ ກັບ ພະໂຍທາສົງຄາມ ລົງໄປເຖິງລ່ອງ ບາງກອກ ໃນ ເດືອນ ຍີ່ ຂຶ້ນ 11 ຄ່ຳ. ເຈົ້າຊີວິດສະຫຍາມ ໄດ້ສັ່ງໃຫ້ສົ່ງເຈົ້າ ອະນຸວົງ ແລະ ບຸດຊາຍ ທີ່ຖືກຈັບ ໄປທັງໝົດ ມາລວມກັນຢູ່ທີ່ ທີມແປດຕຳຫລວດ ແລ້ວໃຫ້ຄັດເລືອກເອົາລູກຫລານ ແລະ ຊາຍ ຈຳນວນໜຶ່ງ ໄປເປັນພວກຫຍິບແສ່ວ, ເຫລືອນັ້ນໆ ໃຫ້ເຮັດເຄື່ອງປະຈານຢູ່ຕໍ່ໜ້າ ຫໍສຸດໄທສະ ວະລີຍາປາສາດ, ພວກເຂົາເຮັດກົງເຫລັກໃຫຍ່ໃສ່ ເຈົ້າອະນຸວົງ, ກົງເຫລັກນ້ອຍໃສ່ລູກຫລານ ຍາດວົງສາເພີ່ມອີກ 13 ກົງ ຕັ້ງຮຽງຕໍ່ໆ ກັນເປັນແຖວ, ມີເຄື່ອງມືທໍລະມານຕ່າງໆ ຄື: ຄີກສາກ ສຳລັບຕຳ, ເບັດສຳລັບເກາະແຂມ, ໜໍ້ຂາງສຳລັບຕົ້ມ, ຂວານສຳລັບຜ່າເອິກ, ເລື່ອຍສຳລັບ

ເລື່ອຍແຂນຂາ, ຂາຢັ່ງສຳລັບສຽບທັງເປັນ, ເຊື້ອນຳ້ມັນສຳລັບເອົາໄຟເຜົາ, ເຄື່ອງໃສ່ໂທດໄວ້ຄົບຖ້ວນທຸກຢ່າງ ຕັ້ງຮຽງເປັນແຖວຢູ່ກາງສະໜາມໄຊ. ໃນທຸກມື້ຕອນເຊົ້າໆ ພວກສະຫຍາມໄຊເອົາພວກເພີ່ນອອກປະຈານ ຕ່ໜ້າ ຫໍສຸດໄທສະວະລີຍະປາສາດ ຄື: ເຈົ້າອະນຸວົງ ແລະ ລູກ 7 ຄົນ ຄື: ເຈົ້າ ສຸດທິສານ, ເຈົ້າ ລາຊະບຸດ, ເຈົ້າ ເຕ, ເຈົ້າ ປານ, ເຈົ້າ ປັນ, ເຈົ້າ ດວງຈັນ, ເຈົ້າ ສຸວັນນະຈັກ. ຫລານ 5 ຄົນ ຄື: ເຈົ້າ ສຸລິຍະ, ເຈົ້າ ໄຽ່ນຄຳໃຫຍ່, ເຈົ້າ ປ່ານ, ເຈົ້າ ຄຳບຸ, ເຈົ້າ ທອງດີ ແລະ ເມຍຂອງເພີ່ນ ຄື: ເຈົ້ານາງ ຄຳປ້ອງ ລວມ 15 ຄົນ. ຊຶ່ງພວກເພີ່ນເອົາອອກມາຂັງໄວ້ໃນກົງເຫລັກ ພ້ອມທັງໃຊ້ເຄື່ອງຈ່ອງຈຳຄົບທຸກຄົນ, ຊຶ່ງໃຫ້ ເຈົ້ານາງ ຄຳປ້ອງ ຖືວ່ຳພາບໝາກເຂົ້າໄປນັ່ງວ່ຳຢູ່ໃນກົງ, ໃຫ້ພວກຊາຍານ້ອຍ ທີ່ຍັງສາວແຕ່ງຕົວນຸ່ງສິ້ນ, ຫົ່ມເສື້ອແດງຖືກະເບື້ອງໃສ່ເຂົ້າປາອາຫານໄປລ້ຽງກັນ ຢູ່ທີ່ປະຈານພວກລາດສະດອນຍິງ - ຊາຍໃນ ແລະ ນອກເມືອງພາກັນມາເບິ່ງຈົນແໜ້ນທຸກວັນເວລາບໍ່ໄດ້ຂາດ ລາງພວກກໍມານັ່ງປ້ອຍດ່າສາບແຊ່ງ ເຖິງຍາມແລງ ກໍເອົາພວກເພີ່ນມາຂັນຂາຢັ່ງເປັນແຖວກັນໄປ ໃຫ້ຮ້ອງປະຈານໂທດຂອງຕົນຕ່າງໆ ເຖິງຄ່ຳ ຈິ່ງໄປຂັງໄວ້ໃນຫົມແປດຕຳຫລວດ ຄືເກ່ົາ: ເຮັດຢູ່ຄືແນວນັ້ນ ໄດ້ 7 - 8 ມື້ ເຈົ້າ ອະນຸວົງ ທົນຕ່ົາການທໍລະມານອັນປ່າເຖື່ອນນີ້ບ່ໄດ້ ຈິ່ງເປັນໄຂ້ລົ້ມເຈັບລົງ ແລະ ເລືອດໄຫລຕະຫລອດໄດ້ 3 ວັນ ແລ້ວກໍສິ້ນພະຊົນ. ຫລັງຈາກເພີ່ນໄດ້ສິ້ນພະຊົນໄປ, ພວກແຜ່ອານາເຂດສະຫຍາມຍັງເອົາສົບຂອງເພີ່ນ ໄປສຽບປະຈານຢູ່ສຳເຫລ້ືອກ, ສ່ວນລູກຫລານຂອງເພີ່ນ, ພວກເຂົ້າຍັງສົບຕ່ໍທໍລະມານ ແລະ ຍັງຈ່ອງຈຳໄວ້ຕ່ໍໄປ. (ເຈົ້າ ອະນຸວົງ ເກີດເມ່ືອ ປີ ກຸນ 1767 ແລະ ເສຍຊີວິດ ເດືອນ ຍ່ີ ແຮມ ປີ ສະລຸ ເອກະສົກປີ 1829 ລວມອາຍຸໄດ້ 60 ປີ ມີລູກ 23 ຄົນ).



ເມືອງວຽງຈັນຮ້າງ 65 ປີ ຫລັງຈາກຖືກສັກດິນາສະຫຍາມເຜົາຜານ ໃນປີ 1828

✹ ເວລາຂຸດເຈາະຖະໜົນເຊດຖາທິລາດ ແລະ ສາມແສນໄທ ຊ່ວງຊານໄດ້ພົບ ຊັ້ນຂີ້ເທົ່າ ໜາເຖິງ 15 ຊັງຕີແມັດ ຄົງແມ່ນເທົ່າຈາກໄມ້ເນື້ອແຂ່ງແນ່ນອນ, ພ້ອມກັນນີ້ກໍສັງເກດເຫັນຝາວັດ ທີ່ແຕກເປັນປ່ຽງໆ ເໝືອນຖືກລະເບີດ ຈຶ່ງສັນນິຖານວ່າ ເຂົາໄດ້ໃຊ້ໝໍ້ລະເບີດທຳລາຍວັດວາອາຮາມ ແລະ ຫໍໂຮງຕ່າງໆ ໃນເມືອງວຽງຈັນ ຢ່າງປ່າເຖື່ອນທີ່ສຸດ.

ໃນຄັ້ງນີ້ສະຫຍາມຍັງໄດ້ລັກເອົາຊັບສົມບັດຄ່າໄປນຳ: ເງິນ, ຄຳ, ເພັດນິນຈິນດາ ຂອງພະຄັງຫລວງ, ຂອງວັດ, ຂອງປະຊາຊົນ, ນັບທັງພະບາງໄປອີກ ແລະ ພະພຸດທະຮູບອື່ນໆ: ພະແຊກຄຳ, ພະເສົ້າ, ພະເສີມ, ພະໃສ, ພະສີງນຳ້, ພະເງິນຫລໍ່, ພະເງິນບຸ, ພະແກ່ນຈັນ... ແລະ ຂົນເອົາເອກະສານມໍລະດົກຂອງຊາວລາວທາງດ້ານປະຫວັດສາດ,ວັນນະຄະດີ, ສິລະປະ ກຳ ນັບເປັນຫລາຍຮ້ອຍກວຽນງົວໄປ. (ສ່ວນພະສຸກແມ່ນຖືກແພຂວ້ຳຈົມຢູ່ນຳ້ຂອງ ຕໍ່ໜ້າ ບ້ານ ເວີນສຸກ ເມືອງ ໜອງຄາຍ ມາ ເຖິງທຸກວັນນີ້).

ຕາມພິງສະວະດານຂອງທ່ານມະຫາສິລາ ວີຣະວົງ ແລະ ຕາມບົດຄົ້ນຄ້ວາ“ ຄົນລາວ ໃນເມືອງໄທ ” ຂອງ ທ. ບຸນສີງ ຄອນວິຊຳ 1996.

F. Garnier ເມື່ອມາລາວໃນປີ 1873 ໄດ້ຂຽນໄວ້ວ່າ: “ ມັນແມ່ນການປາບປາມຢ່າງໂຫດຫ້ຽມ, ຜູ້ທີ່ປະລາໄຊແມ່ນໄດ້ຖືກຍັດເຂົ້າໄປໃນເຮືອນແລ້ວເອົາໄຟເຜົາທັງເປັນ. ຈຳນວນຊະເລີຍເສິກສ່ວນຫລາຍ ທີ່ຖືກບັງຄັບໄປໄທໄດ້ລົ້ມຕາຍ ຕາມທາງຢ່າງໜ້າສົມເພດເວດທະນາທີ່ສຸດ ສ່ວນເຫລືອກໍໄປມອບເປັນຂ້າທາດຂອງເຈົ້ານາຍສະຫຍາມ”

ຊາກສະຫລັກຫັກພັງຂອງ ຫໍພະແກ້ວ ທີ່ຖືກສະຫຍາມຈູດເຜົາ ແລະ ກວາດເອົາສິ່ງຂອງມີຄ່າໄປ ໃນປີ 1828



ຊາກສະຫລັກຫັກພັງ ຂອງວັດທີ່ຖືກສະຫຍາມຈູດເຜົາປີ 1828 (ຮູບຖ່າຍປີ 1912)




ວັດກາງ ຫລັງສົງຄາມ (ສະຖານທີ່ ໂຮງແຮມລ້ານຊ້າງດຽວນີ້).




ວັດຍອດແກ້ວ ຫລັງສົງຄາມ (ສະຖານທີ່ຫໍພັກແພດສາດ ດຽວນີ້).

ວັດເພຍວັດ ທີ່ຖືກສະຫຍາມທຳລາຍມາໄດ້ກວ່າ 80 ປີ ແລ້ວ (ຮູບຖ່າຍປີ 1912)





ສິ່ງເສດເຫລືອຂອງ ວັດຈັນ
ຍັງມີພຽງແຕ່ທາດດຽວນີ້ເທົ່ານັ້ນ
(ຮູບຖ່າຍປີ 1912).




ຮູບແຕ້ມຂອງ ປາກມ້ຽຈີເອ
(H. Parnentier) ປີ 1914.



ພາບວັດອິນແປງ ພາຍຫລັງສົງຄາມ ປີ 1828

ຫ້າມຈຳໜ່າຍ



ຮູບພະທາດຫລວງ ທີ່ຖືກພວກສັດຕູຂຸດຄົ້ນເອົາສິ່ງຂອງມີຄ່າໄປຈົນໝົດ ໃນປີ 1873

V. ຄວາມໝາຍປະຫວັດສາດ.

ພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມ, ເຈົ້າ ໄຊຍະເຊດຖາທິລາດ, ເຈົ້າ ສຸລິຍະວົງສາ ແລະ ເຈົ້າ ອະນຸວົງ, ອານາຈັກລາວລ້ານຊ້າງໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຂະຫຍາຍຕົວຈະເລີນຮຸ່ງເຮືອງ, ປະຊາຊົນລາວມີມູນເຊື້ອຮັກຊາດ, ສາມັກຄີຕໍ່ສູ້ບໍ່ຍອມຈຳນົນເມື່ອຖືກສັກດິນາຕ່າງດ້າວເຂົ້າມາຢຶດຄອງມີຈິດໃຈຮັກຊາດ ແລະ ຄຽດແຄ້ນ ຕໍ່ສັດຕູຂອງຊາດ ຈຶ່ງພາກັນລຸກຮື້ຂຶ້ນ ຕໍ່ສູ້ຢ່າງພິລະອາດຫານ ໂດຍສະເພາະ ພາຍໃຕ້ການນຳພາຂອງ ເຈົ້າອະນຸວົງ ໃນຊຸມປີ 1825 -1829. ປະຊາຊົນລາວບັນດາເຜົ່າ ແຕ່ເໜືອຮອດໃຕ້ ໃນປະເທດທັງສອງຟາກຝັ່ງແມ່ນ້ຳຂອງ ໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນ, ພວກສັກດິນາສະຫຍາມໄດ້ຍອມຮັບວ່າ: " ສົງຄາມຄັ້ງນີ້ຝ່າຍລາວ ແມ່ນມີຄວາມແຂງແຮງຫລາຍ, ຖ້າຈະປຽບໃສ່ພະມ້າ ທີ່ພວກເຂົາເຄີຍເຮັດສົງຄາມຜ່ານມາຫລາຍຄັ້ງ ກໍບໍ່ທໍ່ລາວໃນຄັ້ງນີ້ ແລະ ຈະຫາເສິກອື່ນໆ ໃນພົງສາວະດານ ຫລື ຈົດໝາຍເຫດເກົ່າມາປຽບ ກໍສູ້ເສິກລາວຄັ້ງນີ້ ບໍ່ໄດ້ ".

ສາຍເຫດ ທີ່ພາໃຫ້ຂະບວນການລຸກຮື້ຂຶ້ນຕໍ່ສູ້ ຂອງປະຊາຊົນລາວ ກໍຄືຊາວ ນະຄອນຫລວງວຽງຈັນ ພາຍໃຕ້ການນຳພາຂອງບັນດາວິລະກະສັດ ບໍ່ໄດ້ຮັບໄຊຊະນະນັ້ນມີຄື:

1. ຍ້ອນສະພາບການສາກົນບໍ່ອຳນວຍເວລານັ້ນ ບໍ່ທັນມີທິດສະດີປະຕິວັດ ທີ່ກ້າວໜ້າ, ດັ່ງນັ້ນ ຝ່າຍລາວ ຈຶ່ງບໍ່ມີບ່ອນອີງອັນໜັກແໜ້ນ. ມີແຕ່ອີງໃສ່ການຊ່ວຍເຫລືອ ອັນຈຳກັດຂອງສັກດິນາອານາມ (ຫວຽດນາມ) ເພາະເຂົາເຈົ້າເອງ ກໍມີບັນຫາຫຍຸ້ງຍາກ ຫລາຍອັນຢູ່ພາຍໃນອານາຈັກຂອງຕົນ.

2. ສາຍເຫດຕົ້ນຕໍ ແລະ ມີລັກສະນະຕັດສິນ ແມ່ນຍ້ອນຄວາມສາມັກຄີພາຍໃນຍັງບໍ່ທັນແໜ້ນແກ່ນເທົ່າທີ່ຄວນ, ເພາະອານາຈັກລ້ານຊ້າງເວລານັ້ນ ໄດ້ແຍກກັນອອກເປັນ 3 ອານາຈັກ ຄື: ອານາຈັກລ້ານຊ້າງວຽງຈັນ, ອານາຈັກລ້ານຊ້າງ ຫລວງພະບາງ ແລະ ອານາຈັກລ້ານຊ້າງຈຳປາສັກ. ແຕ່ລະອານາຈັກກໍຢູ່ເປັນເອກະລາດພໍໃຜພໍມັນ. ເຖິງວ່າໄດ້ຮ່ວມມືກັບ ເຈົ້າ ອະນຸວົງ ແຕ່ກໍບໍ່ເຕັມເມັດເຕັມໜ່ວຍ, ບໍ່ສຸດກຶກສຸດປາຍ, ເມື່ອເຫັນທ່າປະລາໄຊຂອງສົງຄາມແລ້ວ ເຈົ້າ ມັນທະຕຸລາດ ແຫ່ງອານາຈັກລ້ານຊ້າງ ຫລວງພະບາງ ກໍເຂົ້າຊ້າງສະຫຍາມໂລດ. ອານາຈັກລ້ານຊ້າງ ຈຳປາສັກ ກໍມີເຈົ້າ ລາຊະບຸດໂຍ້ ທໍ່ນັ້ນທີ່ໄດ້ໃຫ້ການຮ່ວມມືຢ່າງສຸດໃຈ, ສ່ວນເຈົ້າ ຮຸຍ ເຊື້ອສາຍຂອງ ເຈົ້າ ໄຊຍະກຸມມານ ນັ້ນ ເມື່ອເຫັນການປະລາໄຊຂອງສົງຄາມ ແລ້ວກໍເຂົ້າຊ້າງສະຫຍາມທັນທີ. ຍິ່ງໄປກວ່ານັ້ນໃນກະໂຕອານາຈັກລ້ານຊ້າງວຽງຈັນ ເອງ ເຈົ້າ ອຸປະຣາດ ຕິດສະ ເຖິງຈະຮ່ວມມືມາແຕ່ຕົ້ນກໍຕາມ, ພໍເຫັນທ່າປະລາໄຊຂອງສົງຄາມ ກໍເຂົ້າຍອມແມ່ທັບສະຫຍາມ, ສ່ວນສັກດິນາເມືອງໃຫຍ່ນ້ອຍອື່ນໆ ເຊັ່ນ: ເມືອງ ພວນ, ເມືອງ ນ່ານ, ເມືອງ ແພ່

ເປັນຕົ້ນ ກໍມີລັກສະນະດ່ັງດຽວກັນລ້ວນແຕ່ບໍ່ສຸດກົກສຸດປາຍ. ບັນຫາສຳຄັນອີກອັນໜ່ຶງແມ່ນ ສະຕິຊາດບໍ່ສູງ ຫາກໍເລ່ີມຕົ້ນຂ້ຶນແຕ່ຍ້ັງອ່ອນນ້ອຍ, ພ້ືນຖານເສດຖະກິດທ້ັງໝົດຂ້ຶນກັບທຳມະຊາດ, ສັກດິນາອ້ອມຂ້າງ ມີກົນອຸບາຍຮຸກຮານຕະຫລອດເວລາ. ອັນນ້ັນມັນແມ່ນທາດແທ້ ຂອງ ລະບອບສັກດິນາທ່ີເຫັນແກ່ຕົວ, ຖ້ືປະໂຫຍດສ່ວນຕົວສູງກວ່າຂອງຊາດ ອັນພາໃຫ້ການຕ່ໍສູ້ຄ້ັ້ງ ນ້ີບໍ່ໄດ້ຮັບໄຊຊະນະ ດ່ັງທ່ີຄາດໄວ້

3. ຍ້ອນການກໍ່ສ້າງກຳລັງ ແລະ ພາຫະນະສິ່ງຄາມບໍ່ພ່ຽງພໍ, ສະແດງອອກຢູ່ໃນການ ຈັດວາງກຳລັງ ແລະ ຍຸດທະວິທີສູ້ຮົບບໍ່ຮອບຄອບ, ກຳນົດເປ້ົາໝາຍສັດຕູບໍ່ຈະແຈ້ງ, ຂາດການ ສືບຂາວ, ຍ້ັງບໍ່ມີການປະສົມປະສານສົມທົບດ້ວຍຫລາຍຮູບການຕ່ໍສູ້, ອາວຸດກຳລ້າສະໄໝກ່ວາ ສະຫຍາມ, ຈ່ຶງເຮັດໃຫ້ການຕ່ໍສູ້ກູ້ເອກະລາດ ບໍ່ສຳເລັດຕາມຈຸດປະສົງ.

4. ການບັນຊາຕ່ໍສູ້ກໍມີຂ້ໍບົກຜ່ອງ ເຊ່ັນ: ໃນເວລາຢຶດ ໂຄລາດ ໄດ້ແລ້ວ ແທນທ່ີຈະສາ ມາດຕ້ັງກອງທັບອັດດ່ານ ຢ່າງໜາແໜ້ນ ຕາມແຜນການ, ແຕ່ພັດມີຊ່ອງວ່າງ ເຮັດໃຫ້ກອງທັບ ຂອງພວກ ນະຄອນລາຊະສີມາ ເລັດລອດເຂ້ົາມາບຸກຍາດເອົານະຄອນ ດ່ັງກ່າວ ຢູ່ດ້ານຫລັງ ໄດ້. ເມ່ືອຮູ້ວ່າກອງທັບສະຫຍາມ ເຄ່ືອນເຂ້ົາມາພັດຟ້າວຖອນທັບຈາກຊ່ອງແຄບ ດ່ິງພະຍາໄຟ ມາຕ້ັງຢູ່ ໜອງບົວລຳພູ (ເອົາສາຍພູພານເປນເຂດ) ຊ່ຶງບໍ່ເໝາະສົມແລ້ວເຮັດໃຫ້ເສຍແຜນ ການ. ແຕ່ຕົວຈ່ິງກອງທັບສະຫຍາມ ກ່ອນຈະບຸກເຂ້ົາ ດ່ິງພະຍາໄຟ ຂ້ຶນມາໄດ້ກໍໃຊ້ເວລາເປັນປ ກວ່າ ຖ້າບໍ່ຖອຍທັບຈາກຊ່ອງແຄບ ດ່ິງພະຍາໄຟ ແລະ ໂຄລາດ ກໍອາດໄດ້ໄຊຊະນະ.

5. ສ່ວນສັກດິນາສະຫຍາມ ແມ່ນໄດ້ຮັບການຊ່ວຍເຫລ້ືອ ຈາກຕ່າງປະເທດ ໂດຍສະ ເພາະແມ່ນ ບັນດາປະເທດນາຍທຶນຕາເວັນຕົກ ນັບທ້ັງດ້ານກຳລັງທະຫານ, ພາຫະນະອາວຸດ ແລະ ດ້ານເສດຖະກິດອ່ືນໆ, ສະນ້ັນຈ່ຶງເຮັດໃຫ້ສັກດິນາສະຫຍາມ ມີກຳລັງແຮງເໜ້ືອກ່ວາ ແລະ ສາມາດເອົາຊະນະໃນສ່ິງຄາມໄດ້.

ແຕ່ວ່າ: ເຖ່ິງແມ່ນຂະບວນການຕ່ໍສູ້ ກອບກູ້ເອົາເອກະລາດ ຂອງປະຊາຊົນລາວ ຕ້ານ ພວກສັກດິນາສະຫຍາມ ນຳໂດຍເຈ້ົາ ອະນຸວົງ ນ້ັນບໍ່ໄດ້ຮັບໄຊຊະນະກໍຕາມ, ແຕ່ມັນກໍມີຄວາມ ໝາຍປະຫວັດສາດ ທ່ີສຳຄັນຕ່ໍຊາດລາວ. ມູນເຊ້ືອອັນອົງອາດກ້າຫານບໍ່ຍອມຈຳນົນ ແລະ ວິ ລະກຳອັນລຳເລ່ີດໃນຄ້ັ້ງນ້ັນ ໄດ້ຢ່ັງເລ່ິກຢູ່ໃນຈ່ິດໃຈຂອງຄົນລາວທຸກຄົນ, ມັນໄດ້ເຮັດໃຫ້ລັດທິ ຮັກຊາດເຂ້ັມຂຸ້ນຍ່ິງຂ້ຶນ, ປະຊາຊົນລາວ ຍ່ິງຄຽດແຄ້ນ ຕ່ໍພວກສະຫຍາມຜູ້ຢຶດຄອງ. ຄວາມສາ ມັກຄີຂອງປະຊາຊົນລາວບັນດາເຜ່ົາ ແລະ ຮ່ວມກັນຕ່ໍສູ້ຢ່າງເຂ້ັມແຂງ ບໍ່ຍອມຈຳນົນເຫລ່ົານ້ັນ ໄດ້ກາຍເປັນມູນເຊ້ືອອັນດ່ີງາມ ມາເຖ່ິງປະຈຸບັນນ້ີ.

ປະຊາຊົນລາວ ໄດ້ຈົດຈຳນ້ຳໃຈຮັກຊາດໃນສະໄໝ ເຈົ້າ ອະນຸວົງ ຢ່າງບໍ່ມີວັນລືມ ໂດຍ ສະເພາະ ເຈົ້າ ອະນຸວົງ ໄດ້ກາຍເປັນແບບຢ່າງແຫ່ງນ້ຳໃຈຮັກຊາດໃນຫລາຍດ້ານ ເຖິງວ່າເພິ່ນ ຈະຖືກໄປຢູ່ຕ່າງປະເທດ ນັບແຕ່ອາຍຸ 11 ປີ, ຖືກອົບຮົມໃຫ້ລືມຊາດ ແຕ່ເພິ່ນພັດກັບກາຍເປັນ ຜູ້ຮັກຊາດຢ່າງດູດດື່ມ, ເພິ່ນໄດ້ຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍ ຈົນກາຍເປັນວິລະກະສັດປົກຄອງວຽງ ຈັນ ແລະ ສາມາດທ້ອນໂຮມແຜ່ນດິນລາວອັນກວ້າງໃຫຍ່ ຊຶ່ງມີຫົວເມືອງທັງໝົດ 165 ຫົວ ເມືອງ, ເພິ່ນໄດ້ນຳພາປຸກລະດົມນ້ຳໃຈຮັກຊາດໃຫ້ຟົດເດືອດຢູ່ທຸກບ່ອນ ເຮັດໃຫ້ປະຊາຊົນລາວ ບັນດາເຜົ່າ ເຂົ້າຮ່ວມການຕໍ່ສູ້ຢ່າງກວ້າງຂວາງ. ນອກຈາກ ເຈົ້າ ອະນຸວົງ ແລ້ວຍັງມີອີກຫລາຍ ຄົນທີ່ໄດ້ສ້າງວິລະກຳອັນລຳເລີດໃນຄັ້ງນັ້ນເຊັ່ນ: ເຈົ້າ ສຸດທະກອນ, ເຈົ້າ ລາຊະວົງ, ເຈົ້າ ລາຊະ ບຸດ, ພະຍາ ນາລິນ ເຈົ້າເມືອງ ສີມຸມ, ພະຍາ ໄກສົງຄາມ, ເຈົ້າເມືອງ ຂຸຂັນ ແລະ ຜູ້ອື່ນໆ ນອກ ນັ້ນທະຫານ ປະຊາຊົນລາວ ອີກນັບບໍ່ຖ້ວນ ກໍໄດ້ເຂົ້າປະກອບສ່ວນຢ່າງອົງອາດກ້າຫານ ຍອມ ເສຍສະຫລະ ໂດຍສະເພາະແມ່ນ ພະຍາ ນະລິນ ແລະ ພະຍາ ສົງຄາມ ພ້ອມກອງທັບ ແລະ ປະຊາຊົນຢູ່ໃກ້ເຂດຊາຍແດນລາວກັບສະຫຍາມ ແມ່ນໄດ້ສ້າງວິລະກຳ ຢ່າງອົງອາດກ້າຫານ ທີ່ສຸດ ແລະ ໄດ້ກາຍເປັນແວ່ນແຍງອັນໃສແຈ້ງ ໃຫ້ແກ່ລູກຫລານລາວຮຸ່ນຕໍ່ໄປ.

ສົງຄາມຕໍ່ສູ້ເພື່ອກອບກູ້ເອກະລາດ ເຖິງຈະບໍ່ໄດ້ຮັບໄຊຊະນະສຸດທ້າຍ ແລະ ຜູ້ນຳລາວ ໄດ້ຖືກສະຫຍາມຈັບໄດ້ ນຳໄປທໍລະມານຢ່າງໂຫດຮ້າຍປ່າເຖື່ອນ ເພື່ອຫວັງດັບມອດນ້ຳໃຈ ຮັກ ຊາດ, ນ້ຳໃຈຕໍ່ສູ້ຂອງປະຊາຊົນລາວ ໃຫ້ໝົດໄປໃນຄັ້ງນັ້ນກໍຕາມ ແຕ່ຜູ້ນຳລາວຈຳນວນໜຶ່ງ ຍັງ ສາມາດເອົາຕົນລົບໜີໄປໄດ້ ແລະ ຍັງສືບຕໍ່ປະຕິບັດໜ້າທີ່ຕົນເຊັ່ນ: ເຈົ້າ ລາຊະວົງ ທີ່ໄດ້ເຄື່ອນ ໄຫວຕໍ່ມາອີກຫລາຍສິບປີ ໂດຍມີທີ່ໝັ້ນຢູ່ເຂດ ຄຳມ່ວນ ແລະ ສະຫວັນນະເຂດ. ການຕໍ່ສູ້ໄດ້ ກາຍເປັນຂະບວນການຂອງ ປະຊາຊົນລາວ ບັນດາເຜົ່າ ໄດ້ຈົດຈຳທີ່ໃຫ້ສືບທອດເອົາມູນເຊື້ອຕໍ່ ສູ້ຂອງ ເຈົ້າ ອະນຸວົງ, ເຈົ້າ ລາຊະວົງ, ຈົນມີພື້ນ ວຽງຈັນ ລາຊະວົງ, ພື້ນທອງດຳວຽງຈັນ ອັນເຮັດ ໃຫ້ມູນເຊື້ອຕໍ່ສູ້ຄັ້ງນັ້ນບໍ່ມີສິ້ນສຸດ ເພື່ອຈາລຶກຜົນງານ ແລະ ຄຸນງາມຄວາມດີ ຂອງບັນພະບູລຸດ ເທົ່ານັ້ນ ພັກຄອມມູນິດອິນດູຈີນ ຈຶ່ງໄດ້ມີມະຕິໃຫ້ປະຊາຊົນ ສ້າງຕັ້ງກອງທັບຕົນເອງຂຶ້ນ ໃນປີ 1949 ຊື່ວ່າ " ກອງລາຊະວົງ " ເພື່ອເປັນກຽດໃຫ້ ເຈົ້າ ລາຊະວົງ ຜູ້ອົງອາດກ້າຫານໃນຫລາຍ ບັນຮົບ ເຊັ່ນ: ສາມາດໃຊ້ຫອກແທງ ພະຍາ ລາຊະສຸພາວະດີ ແມ່ທັບໃຫຍ່ສະຫຍາມ ຕົກລົງ ຫລັງມ້າຟັນ ພະຍາ ພິພິດ ຂາດເຄິ່ງໄດ້.

ພາຍຫລັງສົງຄາມແລ້ວ ເຈົ້າ ລາຊະວົງ ຍັງດຳເນີນການຕໍ່ສູ້ຢ່າງບໍ່ລົດລະຈົນເພິ່ນເຖິງແກ່ ກຳທີ່ ເມືອງ ເວ້. ຊື່ສຽງຮຽງນາມຂອງເພິ່ນ ໄດ້ກາຍເປັນຊື່ຂອງກອງທັບປະຊາຊົນລາວ ກອງໜຶ່ງ ໃນກອງທັບ ປະຊາຊົນລາວ ປະຈຸບັນ.

ສິ່ງທີ່ມີຄວາມໝາຍ ປະຫວັດສາດ ອີກອັນໜຶ່ງ ກໍແມ່ນການຊ່ວຍເຫລືອ ຂອງປະຊາຊົນ ອານາມ ຕໍ່ປະຊາຊົນລາວ. ໃນເວລາເຈົ້າ ອະນຸວົງ ໄປສ້າງຖານທີ່ໝັ້ນຢູ່ໃກ້ ເງ່ອານ ອານາມ ໄດ້ ໃຫ້ທີ່ພັກພາອາໄສ ຂອງກິນເຄື່ອງນຸ່ງອື່ນໆ ພິເສດສຸດກໍແມ່ນກຸ່ມຂອງວົງຕະກຸນ ອົງເວ້ ທີ່ໄດ້ໃຫ້ ການຊ່ວຍເຫລືອລາວຕາມຄວາມສາມາດ. ການຊ່ວຍເຫລືອລາວນັ້ນ ເຖິງວ່າຈະບໍ່ໄດ້ຢ່າງເຕັມ ເມັດເຕັມໜ່ວຍກໍຕາມ, ແຕ່ມີຄວາມໝາຍສຳຄັນທີ່ສຸດສຳລັບປະຊາຊົນລາວ ຈົນໄດ້ກາຍເປັນ ມູນເຊື້ອໃນການພົວພັນແບບພິເສດລາວ - ຫວຽດນາມ ຄືຢູ່ໃນປະຈຸບັນນີ້.

ສົງຄາມນຳໂດຍ ເຈົ້າ ອະນຸວົງ ນັ້ນ, ມັນແມ່ນສົງຄາມອັນຖືກຕ້ອງ ແລະ ເປັນທຳ, ເພາະ ວ່າການລຸກຮື້ຂຶ້ນຕໍ່ສູ້ ຂອງປະຊາຊົນລາວ ບັນດາເຜົ່າ ທົ່ວອານາຈັກລາວລ້ານຊ້າງວຽງຈັນ. ມັນ ແມ່ນການຕ້ານການຮຸກຮານ ແລະ ກົດຂີ່ຂູດຮີດຂອງພວກສັກດິນາສະຫຍາມ ເພື່ອກອບກູ້ເອ ກະລາດ, ອິດສະຫລະພາບຂອງຊາດຄືນມາ ບໍ່ແມ່ນ ເຈົ້າ ອະນຸວົງ ນຳພາເຮັດສົງຄາມຮຸກຮານ ປະເທດອື່ນແຕ່ຢ່າງໃດ.

ສັງລວມແລ້ວ: ໃນວິວັດທະນາການ ແຫ່ງການຄົງຕົວ ແລະ ຂະຫຍາຍຕົວ ຂອງຄົນ ລາວ ແລະ ຊາດລາວ (ປີ 1779 ຫາປີ 1893), ແມ່ນຂະບວນວິວັດ ແຫ່ງການຕໍ່ສູ້ພິລະອາດ ຫານ ລະອິດລະອ້ຽວ ຫຍຸ້ງຍາກລຳບາກ ດ້ວຍຄວາມເສຍສະຫຼະ. ມີບາງໄລຍະກໍໄດ້ມີການພັດ ທະນາເອກະພາບກັນ ແລະ ມີບາງໄລຍະປະເທດລາວລ້ານຊ້າງ ອັນກວ້າງໃຫຍ່ໄພສານ ກໍຖືກ ແຕກແຍກຍ້ອນນະໂຍບາຍແບ່ງແຍກ, ຂອງຕ່າງປະເທດ ແລະ ຄວາມອິດສາບັງບຽດ, ຄຽດຊັງ ຊຶ່ງກັນ ແລະ ກັນຂອງບັນດາກະສັດລາວເອງ, ອັນເຮັດໃຫ້ປະເທດຊາດ ເປັນຫົວເມືອງຂຶ້ນ ຫລື ເມືອງສ່ວຍ ແລະ ໃຫ້ຄົນລາວເປັນຂ້ອຍຂ້າຊາດອື່ນ.

ແຕ່ຍ້ອນຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກດິນດອນຕອນຫຍ້າຂອງຕົນບວກ ໃສ່ກັບມູນເຊື້ອພິລະອາດຫານ, ດຸໝັ່ນຂະຫຍັນພຽນ, ຄວາມສາມັກຄີຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນວິງຄະນາຍາດແຫ່ງຊາດ, ຈຶ່ງໄດ້ມີຫລາຍຄົນ ຫລາຍລຸ້ນ ລຸກຂຶ້ນນຳພາ ປະຊາຊົນລາວ ບັນດາເຜົ່າ ໄດ້ດຳເນີນການຕໍ່ສູ້ຕ້ານການຮຸກຮານ ຂອງພວກສັກດິນາຕ່າງດ້າວ ຢ່າງອົງອາດກ້າ ແກ່ນ ເຊັ່ນ: ຂະບວນການຕໍ່ສູ້ກູ້ເອກະລາດຂອງເຈົ້າ ນັນທະເສນ ປີ 1782 - 1794; ຂະບວນ ການຕໍ່ສູ້ນຳພາໂດຍ ເຈົ້າ ອະນຸວົງ ປີ 1804 -1829 ... ແລະ ໃນທີ່ສຸດບັນດາຂະບວນການຕໍ່ສູ້ ເຫລົ່ານັ້ນ ລ້ວນແຕ່ບໍ່ໄດ້ຮັບໄຊຊະນະຢ່າງສົມບູນ, ນັ້ນແມ່ນຍ້ອນບໍ່ມີການເຕົ້າໂຮມຄວາມສາ ມັກຄີພາຍໃນໃຫ້ແໜ້ນແຟ້ນ ແລະ ຍ້ອນສາຍເຫດອື່ນໆ ທັງພາວະວິໄສ ແລະ ອັດຕະວິ ໄປ ພ້ອມໆ ກັນ. ເຖິງວ່າບັນດາຂະບວນການລຸກຂຶ້ນຕໍ່ສູ້ ຕ້ານການຮຸກຮານຈາກສັກດິນາຕ່າງດ້າວ ຂອງບັນດາກະສັດ ກໍຄືຂອງປະຊາຊົນລາວບັນດາເຜົ່າ ບໍ່ໄດ້ຮັບໄຊຊະນະກໍຕາມ, ແຕ່ມັນກໍເປັນ

ມູນເຊື້ອການຕໍ່ສູ້ທີ່ສະແດງໃຫ້ເຫັນ ເຖິງຄວາມພິລະອາດຫານລະອິດລະອ້ຽວ ໂດຍການເສຍສະຫລະບໍ່ຍອມຈຳນົນ ເຖິງນ້ຳໃຈຮັກຊາດ ອັນສູງສົ່ງຂອງຄົນລາວ, ຊາດລາວ, ໂດຍສະເພາະແມ່ນຂອງຊາວ ນະຄອນຫລວງວຽງຈັນ ແຕ່ລະຍຸກແຕ່ລະສະໄໝ ຂະບວນວິວັດທາງປະຫວັດສາດນັ້ນ ມັນໄດ້ກາຍເປັນບົດຮຽນອັນລ້ຳຄ່າ, ເປັນແວ່ນແຍງທີ່ປະເສີດ ເພື່ອສຶກສາກໍ່ສ້າງຄົນຮຸ່ນໜຸ່ມຂອງທຸກຊົນເຜົ່າ ແລະ ເພື່ອໃຫ້ເຂົາເຈົ້າຮູ້ຈັກກັບປະຫວັດສາດ ຄວາມເປັນມາຂອງຊາດຕົນໄດ້ເປັນ ຢ່າງດີ.

ພາຍຫລັງ ທີ່ປະເທດຊາດ ກໍຄືອານາຈັກລາວລ້ານຊ້າງ ໄດ້ຕົກເປັນຫົວເມືອງຂຶ້ນ ແລະ ເມືອງສ່ວຍຂອງສັກດິນາສະຫຍາມ ແຕ່ປີ 1779 ເຖິງປີ 1893 ນັ້ນ, ພວກແຜ່ອານາເຂດສັກດິນາສະຫຍາມ ໄດ້ເພີ້ມທະວີການກົດຂີ່ຂູດຮີດ, ການເກັບເກນ ແລະ ການປາບປາມ ປະຊາຊົນລາວຢ່າງໜັກໜ່ວງກວ່າເກົ່າ. ພ້ອມດຽວກັນນັ້ນ, ປະຊາຊົນລາວບັນດາເຜົ່າ ກໍຄືຊາວນະຄອນຫລວງວຽງຈັນ ກໍໄດ້ກາຍເປັນຈຸດສົນໃຈ ແລະ ເປົ້າໝາຍຄອບຄອງຈັກກະພັດຝຣັ່ງ ແລະ ອັງກິດ, ຄືປີ 1866 - 1868 ຈັກກະພັດຝຣັ່ງໄດ້ເຂົ້າມາສຳຫລວດປະເທດລາວ, ມາໃນວັນທີ 20 ເມສາ 1867 ພວກເຂົາໄດ້ສຳເລັດການແຕ້ມແຜນທີ່ປະເທດລາວ. ເກັບກຳສະພາບການຮອບດ້ານຂອງລາວຢ່າງຖີ່ຖ້ວນ ແລະ ມາເຖິງປີ 1886, ຈັກກະພັດຝຣັ່ງ ກໍສຳເລັດການຕັ້ງກົງສູນຢູ່ເມືອງ ຫລວງພະບາງ. ຈາກນັ້ນເປັນຕົ້ນມາ ຈັກກະພັດຝຣັ່ງ, ອັງກິດ ແລະ ສັກດິນາສະຫຍາມ ກໍໄດ້ຍາດກັນຕັດແບ່ງການປົກຄອງ ແລະ ຢຶດຄອງເອົາລາວເປັນຫົວເມືອງຂຶ້ນ, ໂດຍຕັດແບ່ງດິນແດນຂອງອານາຈັກລ້ານຊ້າງ ຝັ່ງແມ່ນ້ຳຂອງກ້ຳຂວາ ໃຫ້ເປັນເຂດອິດທິພົນຂອງອັງກິດ, (ເວັ້ນແຕ່ພາກສ່ວນໜຶ່ງຂອງສອງ ແຂວງ ຈຳປາສັກ ແລະ ໄຊຍະບູລີ), ສ່ວນດິນແດນຢູ່ເບື້ອງກ້ຳຊ້າຍຂອງແມ່ ນ້ຳຂອງ ເປັນເຂດປົກຄອງຂອງຝຣັ່ງ.

ປະຫວັດສາດ ນັບແຕ່ນັ້ນມາ ກ້າວເຂົ້າສູ່ການຕໍ່ສູ້ໄລຍະໃໝ່, ໄລຍະແຫ່ງການຕໍ່ສູ້ປົດປ່ອຍຊາດກູ້ເອົາເອກະລາດ, ອິດສະຫລະພາບ ຕ້ານກັບພວກຝຣັ່ງ ຜູ້ຮຸກຮານ, ຢຶດຄອງ ແລະ ຖືດນັ້ນມາ ກໍແມ່ນການຕໍ່ສູ້ກູ້ຊາດ ຕ້ານລັດທິລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາ.



ຫໍພະແກ້ວ ທີ່ວຽງຈັນ ຖືກສັກດິນາສະຫຍາມທຳລາຍ
ໃນປີ 1827 (ໄດ້ຮັບບູລະນະໃໝ່ ໃນປີ 1936)

ຟື້ນຄວາມເກົ່າ ເລົ່າຄວາມແຄ້ນ
ຊອກຫາແກ່ນ ສັດຈະທຳ

ໂດຍ: ດຣ. ທອງຄຳ ອ່ອນມະນີສອນ

* ປຶ້ມນີ້ ຈາກ່າວເລື່ອງ
ຄະນະອະນຸກຳມະການຂຽນປະຫວັດ ວຽງຈັນ
ຮຽນອ່ານສຸດເສັດແລ້ວ
ເລີດເດັ່ນຫລາຍຂອດຂໍ້

* ເຫດການເຄີຍມີດອ້ຳ
ຂ້ຽຄອກຄວາມຄຳຈິງ
ມືນບໍ່ຫວນເຫັນຮູ້
ລາງເທື່ອຫລົງພາດພັ້ງ

* ຫລາຍຈຸດເພີ່ນຊອກໄດ້
ຊັກບອກເບີຍບານເຜີຍ
ແກ້ບ່ອນບັນຫາຫຍຸ້ງ
ບ່ອນບໍ່ຈະບໍ່ແຈ້ງ
* ເລື່ອງນີ້ຄົ້ນຄິດແລ້ວ
ແຍງສ່ອງທາງໃນມີ
ເປັນໜໍ່ແນວນາມຊັ້ນ
ສາມາດແນມລະນຶກຮູ້

* ສາລະພັດລະນຶກໄດ້
ໃສສ່ອງເຫັນຄວາມຫລັງ
ເຫັນຮອດປັດຈຸບັນນີ້
ຈ່ຽງປ່ຽງທາງຕໍ່ໜ້າ

ປະຫວັດສາດວຽງຈັນ
ເປັນຜູ້ປະພັນຮ່ວມພຽນຂຽນຄົ້ນ
ເຫັນແນວໃນປະເສີດ
ຂໍຊົມເຊີຍຍົກຍ້ອງ
ຍໍໄວ້ແວ່ນໃຈ
ອຳອະດິດເບືອນບ້ຽ
ຈຸ່ມຈົມຈຳພົ້ນ
ເພາະຫລັກມູນເຊີນຊາດ
ບໍ່ແນມຫລັງບໍ່ເບິ່ງໜ້າ
ພາເວີນເວັ້ນກ້ຽ
ໄຂຂອດທີ່ຄາຫລັກ
ຜີ່ຄວາມຈິງແທ້
ຄຸ້ງເຄືອງຄາວກ່ອນ
ຖະແຫລງຊີ້ຊ່ອຍເຍືອງ
ຈະເຫັນຂອບຕາເວັ້ນແດ
ເມັດມະນີໂຊແກ້ວ
ຊະນິດດີສີຂອງຊາດ
ເຫັນສັດຕູຄູ່ແຄ້ນ
ແຖນຟ້າໝູ່ປະຊາ
ໃນແວ່ນວິງສະໄໝ
ອະດີດວຽງຈັນນັ້ນ
ບໍ່ມີຄາຈັກຢ່າ
ອະນາຄົດຢູ່ຖ້າ
ຊິພາກ້າວເກ່ງກໍເຫັນ

* ປີ້ນນີ້ ບໍ່ແມ່ນຂຽນເພື່ອແຄ້ນ
ບໍ່ລະດົມຄວາມຊັງ
ບໍ່ແມ່ນໄຂແຜນຜ້ຳ
ບໍ່ແມ່ນຂັງຂຸ່ນຂ້ອງ
* ບໍ່ແມ່ນຂຽນເພື່ອຮ້ີ
ພຽງເລົ່າມາໃຫ້ຄົນຟັງ
ບໍ່ແມ່ນຂົມຂວາຍໄຈ້
ອາຄາດຄຽນເຄັ່ງຂ້ອງ
* ອາດຊິຕຳຕ່ອຍຕ້ອງ
ເໜັບແນບຄົມຂວານເພັດ
ຝຽງເພື່ອນໄທເຮືອນໃກ້
ຄົງບໍ່ເຫງົາງ່ວມເສົ້າ

* ຢາກຮູ້ການອະດີດນັ້ນ
ປະຫວັດຄວາມເປັນຈິງ
ຄົນປະຫວັດຂຽນແຈ້ງ
ຄົນຫລັກຖານບໍ່ແໜ້ນ

* ແພງຂວັນຢາກເກ່ງກ້າວ
ໄປວ່ອງໄວທັນຍຸກ
ຕ້ອງທັນມາແນມສິ້ງ
ສຶກສາສຸດຂີດຂັ້ນ

* ປະຫວັດສາດວຽງຈັນ!
ຄົນບໍ່ຂຽນຍຸກນີ້
ງ້ວງເງົາງົງງຶມງວາ
ຂອງດີມີຄຸນຄ່ຳ
ເລື່ອງເກົ່າຈິງຖືກແກ້

ເຄື່ອງຄຽດຂົມຂັ້ງ
ຊ່ວງຊິງໄຂແກ້
ກຳເຫລັກຊິແຫງທັ່ງ
ປອງປັ້ນປັ່ນຂະບວນ ດອກໃດ
ປະຫວັດສາດສະໄໝຫລັ້ງ
ບໍ່ແມ່ນຝັ່ງຄວາມແຄ້ນ
ໄຂຂຸມພະຍາບາດ
ຂັນຈໍ້ຈ່ອງເວນ ດອກໃດ
ຕີໝາກຫົວໃຈເຈັບ
ຜ່າກະໂປງກະບານໄດ້
ເຮືອນໄກສະໄໝເກົ່າ ບູຮານພຸ້ມ
ຄົງຊິເຫັນເຫດເຄົ້າ
ຫາກລາວເວົ້າເລົ່າຄືນ
ສຳຄັນແມ່ນມູນຫລັກ
ເຫດການຈິງພ້ອມ
ໃຜແປງກຳແສນຍາກ
ແສນສັດຕູໂຫດຮ້າຍ
ຊິໝາຍປັ້ນປ່ຽນແປງ
ລາວເດັ່ນດາວສະໄໝ
ພັດທະນາບຸກໜ້າ
ຫລິງຫລັງຟັງອະດີດ
ກອງກັ່ນອັນປະເສີດລ້ຳ
ນຳໃຊ້ຊ່ອຍຢ່າລືມ ແທ້ເນີ
ຍຸກໃໝ່ຄືນຊີຫລິງ
ເຂ່ຍຄວາແຕ່ຂອງເກ້
ຊຳລິງນ້ຳເໜົ່າ
ເປັນມິດແຖຖາກໄສ້
ເຈາະຈີ້ມສຽບໜ່ວຍໃຈ ຊັ້ນໃດ

* ຕົກຢູ່ໃນໝອກມົ້ວ
ບໍ່ສ່ອງໃສໄຫວພິບ
ບໍ່ເຫັນຄົນດີໄດ້
ພວກມິດທຽມມິດແທ້
* ດາບໂຕເອງງັດໄວ້
ຄົນໂຕເປັນຄົນເຂົ້າ
ແສງຕາເວັນຕຳໜ້າ
ແນມບໍ່ໃສຊອດເບື້ອງ
* ດັ່ງນັ້ນ:
ເກີດເປັນລາວຕ້ອງຮັບຮູ້
ຮູ້ຂ່າວຄາວຫລັກມູນ
ຄົນຊິແພ້ແຊ່ງເຊື້ອ
ເກີດຈາກຮຽມຖີ່ຖ້ວນ

* ຄົນເມົາມົວມືດມົ້ວ
ບໍ່ພາກພຽນສຶກສາ
ຍອມເປັນຄົນໝົກໝໍ້ນ
ຄົນມືດຖືກແກ່ທົ້ນ

* ບໍ່ຮຽນ ທ່ານບໍ່ຮູ້
ມ້າງມຸ່ນພັງເພຈົມ
ວັດວາອາຮາມໄໝ້
ຮອດວັດຫໍພະແກ້ວ

* ສິລະປະກຳພໍ່ພ້ອມ
ວັນນະກຳມະຫານສານ
ແນວດີໆຂົນໄປກ້ຽງ
ເຜົ່າມຸ່ນພັງຜຸ່ຍຖິ້ມ
* ຍັງແຕ່ຊາກເທົ່າໄໝ້

ມົວມືດທາງສະໝອງ
ສະຫລາດຫວນເຫັນຮູ້
ຄົນປອມຈັ່ງໃດແມ່
ບໍ່ມີຮູ້ຮ່ອມວິໄຈ
ແທ່ງໝາກຫົວໃຈຕົນ
ເບິ່ງເບົາບໍ່ເຫັນແຈ້ງ
ຕຳຕາຄ້ຳຊິບອດ
ສະຖານທ້ອງຮົ່ມເຢັນ

ປະຫວັດສາດຂອງລາວ
ຊັດເຈນເຫັນແຈ້ງ
ເຄືອສາຍຊາດກຳເນີດ
ປະຫວັດສາດເລິກລ້ວນ
ຈົ່ງຊວນຟື້ນຕື່ນຕົວ
ບໍ່ມີຫວ່ຽງຫາຮຽນ
ອ່ານຕຳລາຄວາຄົ້ນ
ຫລ້ຽກົນຊາດອື່ນ
ຈຸງດັ່ງຢືນຢ່າງງ້ວງ
ຢູ່ໃນບ້ວງບາດມານ ແທ້ນາ.
ວ່າວ່ຽງຖືກເຜົ່າຜານ
ຖະຫລົ່ມລ້ຽງພຽງພື້ນ
ວ້ຽງຫລວງວາຍວອດ
ເຜົ່າມຸ່ນມົນມອດສ້ຽງ
ທະລາຍກ້ຽງບໍ່ຍັ້ງ
ພຸດທະຮູບສັກສິດ
ເຄື່ອງເງິນຄຳແກ້ວ
ປະວ່ຽງແປນເປົ່າ
ຖົມພື້ນແຜ່ນທະລ້ຽ
ໄຟມອດບໍ່ທັນໝົດ

ເຫັນແຕ່ເສົາເຮືອນກຸດ
ວຽງຈັນສີວິໄລເຫລື້ອມ
ປ່ຽນເປັນມຸງມ່ານຝ້າ
* ອັນນີ້ບໍ່ແມ່ນຮຽມໄປ່ເວົ້າ
ຫລິບຫລອກຫລອນສອນຄົນ
ບໍ່ແມ່ນໄຂຂາຍໜ້າ
ຂີດຄວາມຈິງເປັນຈັ່ງຊີ້
* ບໍ່ແມ່ນທຳເງືອດແຄ້ນ
ຂົມທະຫານໄປຕີ
ມັນແມ່ນບົດຮຽນເສົ້າ
ເອົາເປັນແບບຢ່າງໄວ້

* ປະຫວັດສາດວ່ານີ້
ເຮົາເບິ່ງເຮົາໃຫ້ເຫັນຄັກ
ແຍງເມືອຫລັງແນມໄປໜ້າ
ກໍ່ໂຫດກຳທໍ່ຟ້າ

* ຄັນຄົນລາວບໍ່ຮັກເຊື້ອ
ເຂົາຊິກືນກິນໝົດ
ໃຜຊິມາຂັບຮ້ອງ
ເພງຊາດລາວມ່ວນແມ້ງ

* ດັ່ງນັ້ນ:
ຄວາມຮູ້ຕ້ອງເກ່ງກ້າ
ພິບໄຫວ ໄວທັນການ
ໃຈແກ່ນແຂງ ກາຍໜັກແໜ້ນ
ເທຢາດເທື່ອຮ່ວມສ້າງ

* ສາມັກຄີຊາດໝັ້ນ
ຖ່ານຖົມອົມໄວ້
ເຮືອງໆເຫລືອງຮຸ່ງ
ນະພາກ້ວຂີ້ຝຸ່ນໄຟ
ຂຽນເປົ່າແປງປະຈົບ
ໃຫ້ວິ່ງວົນແຕ່ແນວຮ້າຍ
ປະຈານຈາເດີນອະດີດ
ມີໄວ້ໃຫ້ຈື່ຈຳ ຫັ້ນທ້ອນ
ເອົາແຄມເປົ່າລະດົມພົນ
ປາບຄົນເພາະຄວາມແຄ້ນ
ເທົ່າລະທົມທວງແສບ
ໄພສົງຄາມຊົ່ວຊ້າ
ໄປໜ້າຢ່າຊິມີ ຊອບແລ້ວ
ຕີຕອກໃຫ້ເຮົາເຫັນ
ເບິ່ງເຂົາໃຫ້ເຫັນແຈ້ງ
ພາເຫັນສັດຕູໂຫດ
ກໍ່ເວນມາທໍ່ພົ້ນ
ຖົມຖ້ວມທົ່ວແຜ່ນດິນ
ບໍ່ແພ້ຊາດລາວເຮົາ
ຊາດຊິເປັນເຂົາພຸ້ນ
ສະຫລອງລຳຂັນແຂ່ງ
ໃຜຊິແພ້ຍົກຍ້ອງ
ອອກມາຮ້ອງຮ່ວມຟັ່ງ ເດນໍ

ປັນຍາສ່ອງແສງໃສ ລາວເອີ
ອ່ານເຫັນບັນຫາໄດ້
ແສນອຸດົມຄວາມສາມາດ
ສຸຂະພາບກັ່ນກ້າວ
ຫັນທ້າວຢູ່ຊ່ວຍາມ
ພັນຜູກແພ້ງຮັກ

24/7 ห้ามจำหน่าย

ສະໝັກສະໝານໂຮມ
ປອງດອງເປັນດຽວໄດ້
ໝຽວແນບໜາໜ່ວງແໜ້ນ

ຮ່ວມແຮງປົກປ້ອງ
ໂດຍດີເດັດດ່ຽວ
ຈັບແຂນຮຽງບ່າໄວ້
ຢູ່ພາຍໃຕ້ພັກດຽວ ຊອບແລ້ວ

ວຽງຈັນ, ວັນທີ 7 ຕຸລາ 2009

ທ.ວ. ທອງສິງ ທຳມະທັດ

ພາກທີສາມ

ນະຄອນຫລວງວຽງຈັນ ພ້ອມກັບປະຊາຊົນລາວ ຝັ່ງຊ້າຍຂອງ ແມ່ນ້ຳຂອງ ຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ ແຕ່ປີ 1893-1954

I. ສະພາບການສາກົນ ແລະ ອາຊີອາຄະເນ ໃນສະຕະວັດທີ XIX (ປີ1800-1900).

ຖ້າເບິ່ງໂລກຕາເວັນຕົກ ແບບງ່າຍໆ ໃນສະໄໝນັ້ນ, ເຮົາຕ້ອງຍອມຮັບວ່າເປັນສ່ວນໜຶ່ງ ຂອງໂລກ ທີ່ຈະເລີນໄວທາງດ້ານແນວຄວາມຄິດ ແລະ ສະຕິປັນຍາຂອງມວນມະນຸດ. ສັງຄົມ - ວັດທະນະທຳຂອງຫລາຍໆປະເທດ ກຳລັງໄດ້ຮັບຜົນກະທົບຈາກລະບອບສັກດິນາ ເປື່ອຍເຍື່ອຍ ຂຶ້ນສູ່ລະດັບສູງ. ຊີວິດຢູ່ໃນພະຣາຊະວັງໂຕນກັນຢ່າງສິ້ນເຊີງ ກັບຊີວິດຢູ່ເຂດຊົນນະບົດຂອງປະ ເທດ. ນັກຂຽນ, ນັກປັດຊະຍາ ຫາວິທີໂຈມຕີລະບອບສັກດິນາຢ່າງຮຸນແຮງ. ຫລາຍໆຄົນກໍ່ຖືກ ຄຸກຕິດຕະລາງໄປຕາມໆກັນ, ແຕ່ພວກເພິ່ນກໍ່ບໍ່ຫວັ່ນໄຫວ ຍິ່ງມີກຳລັງໃຈຕໍ່ສູ້ ເພື່ອຄວາມເປັນ ທຳໃນສັງຄົມໜັກແໜ້ນຂຶ້ນ, ຈົນເຖິງເກີດການປະຕິວັດ ປີ1789 ຂອງຝຣັ່ງ, ກ່ອນຈະເຮັດໃຫ້ ໂຮງຈັກໂຮງງານ ເກີດຜົນຜະລິດຮັບໃຊ້ທົ່ວສັງຄົມໄດ້ຢ່າງທົ່ວເຖິງ; ຊຶ່ງເປັນຈຸດເລີ່ມຂອງຄວາມ ສີວິໄລທາງດ້ານແນວຄິດ ແລະ ດ້ານການກະທຳ ຂອງມວນຊົນຊາວຕາເວັນຕົກ.

1. ການປະຕິວັດທຶນນິຍົມ ເລີ່ມກໍ່ຕົວຂຶ້ນໃນທົ່ວຢູລົບ ຕາເວັນຕົກ (ປີ 1789 -1848).

ມັນສະແດງອອກໃນການຕໍ່ສູ້ ລະຫວ່າງສາມກຸ່ມຄົນໃນສັງຄົມ ຊຶ່ງຝຣັ່ງໃນສະໄໝນັ້ນ ເອີ້ນວ່າ " Tiers - Etat " ຫລື " ຄົນກຸ່ມທີສາມ " ຊຶ່ງໝາຍເຖິງປະຊາຊົນຊາວ ຜູ້ອອກແຮງງານ, ຜູ້ບໍ່ໄດ້ຮັບຄວາມເປັນທຳໃນສັງຄົມ. ສ່ວນກຸ່ມທີໜຶ່ງ ແມ່ນພວກສັກດິນາ ທີ່ມີສິດພິເສດຄື ບໍ່ຕ້ອງ ເຮັດວຽກຫຍັງແຕ່ມີເງິນໃຊ້ຢ່າງຟຸມເຟືອຍ ເພາະຮ່ວມຫົວກັນກັບນາຍທຶນຂູດຮີດແຮງງານ; ກຸ່ມ ທີ່ສອງແມ່ນພວກ " ເຈົ້າຂຸນ " ຫລື ອາມາດ ຊຶ່ງສວຍໃຊ້ສິດພິເສດຂອງສັກດິນາ.

ເມື່ອລະບອບສັກດິນາ ຖືກລົ້ມລະລາຍລົງເທື່ອລະກ້າວຢູ່ບາງປະເທດ, ແຕ່ພວກນາຍທຶນ ບໍ່ມີບ່ອນອີ່ງ ກໍ່ຫັນທິດໄປຊອກຫາຕະຫລາດສິນຄ້າ ຢູ່ຕາມຫົວເມືອງຂຶ້ນຂອງໃຜລາວ ຢູ່ປະເທດ ອື່ນໆ ເຊັ່ນຢູ່ອາຊີ, ອາຟຣິກາ ແລະ ອາເມລິກາລາຕິນ.

2. ການຂະຫຍາຍຕົວ ຂອງເສດຖະກິດ ນາຍທຶນ (ປີ 1848 - 1900).

ໂດຍລວມແລ້ວ, ເມື່ອແນວຄິດ " ທຶນນິຍົມ " ເກີດຂຶ້ນແລ້ວ, ການຄ້າຂາຍ ແລະ ການຂູດ ຮີດແຮງງານ ຕ້ອງສະໜອງຕໍ່ແນວຄິດນີ້ໄປເລື້ອຍໆ ຢ່າງຢຸດບໍ່ໄດ້. ບັນຫາກໍ່ແມ່ນຕ້ອງໄດ້ແຂ່ງ ຂັນກັນຊອກຕະຫລາດຂາຍສິນຄ້າທີ່ລົ້ນຕະຫລາດ, ຊຶ່ງໃນສະໄໝນັ້ນ ຍັງບໍ່ທັນແມ່ນການຜະ ລິດລິດຍົນເປັນສຳຄັນ. ແຕ່ແມ່ນການຜຫະລິດອາວຸດເປັນສຳຄັນກ່ອນໝູ່ ເພື່ອຈະໄດ້ນຳໃຊ້ໄປ ຕີເອົາປະເທດທີ່ບໍ່ທັນມີອາວຸດທັນສະໄໝ ເຊັ່ນ: ປືນໃຫຍ່ມີລໍ້, ປືນນ້ອຍໃຊ້ລູກຂີ້ເຈຍ, ຕໍ່ມາກໍ່ມີ ລູກປືນທີ່ບໍ່ຈຳເປັນຕ້ອງໃຊ້ ຂີ້ເຈຍ ຍັດທາງທໍ່ເລົາປືນ ເທື່ອລະບາດ (ຍິງແລ້ວຍັດໃໝ່) ສະພາບ ການຂະຫຍາຍຕົວຂອງເສດຖະກິດ ແລະ ການແລກປ່ຽນສິນຄ້າ, ສ່ວນໃຫຍ່ແມ່ນຂົນສົ່ງກັນ

ທາງທະເລ, ບໍລິສັດ ເດີນກຳປັ່ນໃຫຍ່ ທາງທະເລ ກໍ່ນັບມື້ເພີ່ມຂຶ້ນ ທັງເຮັດໃຫ້ທັນສະໄໝຂຶ້ນ ເລື້ອຍໆ ເຊັ່ນ: ບໍລິສັດ ຂົນສົ່ງ ອິນເດຍ ຕາເວັນອອກໄກ, ຂອງຝຣັ່ງ ແລະ ບໍລິສັດອື່ນໆ ຂອງອັງ ກິດ. ຊຶ່ງສ້າງຄວາມສະດວກໃຫ້ພວກລ່າເມືອງຂຶ້ນ ຕາວັນຕົກ ຕະຫລອດມາ.

ຍ້ອນການຂູດຮີດແຮງງານ ຢ່າງບໍ່ປານີຂອງພວກນາຍທຶນ ໃນຕອນຕົ້ນຂອງສະຕະວັດທີ XIX ຂະຫຍາຍຕົວແຮງຂຶ້ນລະດັບສູງ, ພວກເຂົາຈຶ່ງພາກັນແຂ່ງຂັນກັນ ລ່າຫົວເມືອງຂຶ້ນ ເປັນ ລະບົບ ແລະ ເປັນຄູ່ໆ ຄື: ສະເປນ ກັບ ປອກຕູເກດ, ອີຕາລີ ກັບ ໂຮລັງ, ຕໍ່ມາກໍ່ແມ່ນຝຣັ່ງກັບ ອັງກິດ. ພວກສອງປະເທດຫລັງນີ້ ຈຶ່ງສາມາດເຂົ້າມາຮອດອາຊີ ເຊັ່ນ: ຢູ່ຈີນ ແລະ ອິນເດຍ ກໍ່ ໄດ້ຮັບຜົນເປັນບາງຫົວເມືອງໃຫຍ່ໆ, ແລ້ວຕໍ່ມາຈຶ່ງເຂົ້າຢູ່ການແບ່ງເຂດຕ່າງໆ ຂອງພວກສັກດິ ນາລວມສູນ ຫລື ບໍ່ທັນລວມສູນໄດ້ ກໍ່ຊຸກຍູ້ໃຫ້ກະສັດທ້ອງຖິ່ນບາງເຊື້ອສາຍຕັ້ງຕົນເອງຂຶ້ນເປັນ ສັກສິນາກະແຈກກະຈາຍ; ເປັນຕົ້ນ ກໍ່ແມ່ນຢູ່ໃນເຂດອາຊີ ຕາເວັນອອກສ່ຽງໃຕ້ ຫລື ອາຊີອາ ຄະເນ ຊຶ່ງລວມອານາຈັກພະມ້າ ອານາຈັກສະຫຍາມ, ລາວລ້ານຊ້າງ, ກຳປູເຈຍ ແລະ ອານາມ, ຟີລິບປິນ, ມາເລເຊຍ ແລະ ອິນດູເນເຊຍ...

ບັນດາປະເທດທີ່ກ່າວມານີ້, ບາງປະເທດກໍ່ກຳລັງຫາວິທີຂະຫຍາຍອານາເຂດຂອງຕົນ, ບາງປະເທດ ກໍ່ກຳລັງຕໍ່ສູ້ກັບການບຸກຍຶດຂອງກະສັດໃກ້ຄຽງ; ທັງມີພວກນາຍທຶນ ຕາເວັນຕົກ ໜູນຫລັງ ໂດຍຂາຍອາວຸດໃຫ້. ແຈ້ງກວ່າໝູ່ກໍ່ແມ່ນ ກໍລະນີລາວລ້ານຊ້າງຂອງພວກເຮົາ ຕ້ານ ກັບພວກສັກດິນາສະຫຍາມ ດັ່ງໄດ້ກ່າວມາແລ້ວ ຢູ່ພາກທີສອງນັ້ນ, ຊຶ່ງກໍ່ແມ່ນກຳລັງອາວຸດທັນ ສະໄໝຂອງຊາວຕາເວັນຕົກເປັນປັດໄຈຊ່ວຍໜູນໄດ້ຢ່າງຊັດເຈນ.

3. ໃນໄລຍະທ້າຍສັດຕະວັດທີ XIX ນັ້ນ ຈັກກະພັດຝຣັ່ງ ແລະ ອັງກິດ ເປັນຄູ່ແຂ່ງຂັນ ກັນທີ່ລ້ຳໃນການຮຸກຮານຍຶດເອົາປະເທດຕ່າງໆ ໃນໂລກ. ໂດຍສະເພາະຢູ່ອາຊີອາຄະເນ ເປັນ ເຂດອຸດົມສົມບູນ ຮັ່ງມີດ້ວຍຊັບໃນດິນສິນໃນນ້ຳ.

ຈັກກະພັດຝຣັ່ງ ເຂົ້າຮຸກຮານອາຊີອາຄະເນ ໂດຍເລີ່ມຈາກທິດຕາເວັນອອກ ຄື: ພາຍຫຼັງ ສົງຄາມປາບ " ໄຕຜິງຫງນກິວ " ຢູ່ ຈີນ ສະຫງົບລົງ ໃນຕົ້ນປີ 1861 ພວກລ່າເມືອງຂຶ້ນຝຣັ່ງ ໄດ້ ຍົກກຳລັງເຂົ້າມາຍຶດເອົາ ໂກແຊ້ງຊິນ (ຫວຽດນາມໃຕ້) ເປັນເມືອງຂຶ້ນ ແລ້ວກໍ່ສືບຕໍ່ເຂົ້າຍຶດ ເອົາ ກຳປູເຈຍ ໃນປີ 1863 ເຊິ່ງໃນເວລານັ້ນ ກຳປູເຈຍ ໄດ້ເປັນເມືອງຂຶ້ນຂອງສະຫຍາມ ຍ້ອນ ສະຫຍາມ ບໍ່ມີຄວາມສາມາດຂັດຂວາງໄດ້ ຮອດປີ 1867 ຈຶ່ງຍອມເຊັນສັນຍາມອບສິດອຳນາດ ໃຫ້ຝຣັ່ງຢູ່ເທິງດິນແດນ ກຳປູເຈຍ ຈຳນວນໜຶ່ງ. ພາຍຫລັງເຂົ້າຍຶດ ໂກແຊ້ງຊິນ (ຫວຽດນາມ ໃຕ້) ແລະ ກຳປູເຈຍ ຊຶ່ງເປັນດິນແດນລຸ່ມແມ່ນ້ຳຂອງ ຕອນໃຕ້ ນັ້ນໄດ້ສ່ວນໃດສ່ວນໜຶ່ງ ແລ້ວ ຈັກກະພັດຝຣັ່ງ ກໍ່ໄດ້ມີແຜນການຍຶດຄອງ ເອົາອານາຈັກລາວລ້ານຊ້າງ ອັນເປັນດິນແດນ ລຸ່ມ

ແມ່ນ້ຳຂອງ ຕອນເໜືອ ເພື່ອຈະນຳໃຊ້ແມ່ນ້ຳຂອງນີ້ ເປັນເສັ້ນທາງເຂົ້າສູ່ **ຢູນານ** ເພື່ອແຂ່ງຂັນກັບອັງກິດ.

ສະພາບການຂອງອານາຈັກລາວລ້ານຊ້າງ ແມ່ນຕົກຢູ່ໃຕ້ການຢຶດຄອງຂອງພວກແຜ່ອຳນາດສະຫຍາມ. ພາຍຫລັງການຕໍ່ສູ້ຂອງ ປະຊາຊົນລາວ ພາຍໃຕ້ການນຳພາຂອງ ເຈົ້າ ອະນຸວົງ ແຫ່ງອານາຈັກລາວລ້ານຊ້າງວຽງຈັນ ຖືກປະລາໄຊແລ້ວ ພວກສັກດິນາສະຫຍາມ ໄດ້ເພີ່ມທະວີການປາບປາມ, ກົດຂີ່ຂູດຮີດປະຊາຊົນລາວ ໂດຍສະເພາະ ໄດ້ກວາດລ້າງເອົາ ປະຊາຊົນ ຊາວນະຄອນຫລວງວຽງຈັນ ໄປເປັນຂ້ອຍຂ້າມ້າໃຊ້ຫລາຍແສນຄົນ ເຮັດໃຫ້ປະຊາຊົນລາວບັນດາເຜົ່າຄຽດແຄ້ນ ເບື່ອໜ່າຍຕໍ່ພວກເຂົາຫລາຍຂຶ້ນ ແລະ ຊອກທຸກວິທີໂຄ່ນລົ້ມແອກປົກຄອງຂອງສະຫຍາມຢ່າງຕໍ່ເນື່ອງພ້ອມທັງເບື່ອໜ່າຍກົງຈັກ ປົກຄອງຂອງສັກດິນາລາວທີ່ແຕກແຍກ ແລະ ປະທັດປະທານກັນຢູ່ເລື້ອຍໆ.

ຈາກສະພາບການຄືດັ່ງກ່າວ, ຈັກກະພັດຝຣັ່ງ ຈຶ່ງຄົ້ນຄວ້າວາງນະໂຍບາຍຢຶດຄອງເອົາ ປະເທດລາວ ດ້ວຍການຂຸດຄົ້ນ ແລະ ໝູນໃຊ້ບັນດາຂໍ້ຂັດແຍ້ງຢູ່ໃນລາວ. ພວກເຂົາຕີລາຄາວ່າ ປະຊາຊົນລາວ ຕ້ອງຫັນມາສະໜັບສະໜູນ ແລະ ຂໍຄວາມ " ອາລັກຂາ " ຈາກຝຣັ່ງ ຖ້າຫາກພວກເຂົານຳໃຊ້ໃບໜ້າ "ສັນຕິພາບ" ເຂົ້າມາ ແລະ ໂຄສະນາວ່າ ຈະມາປົດແອກຄອບຄອງຂອງສະຫຍາມອອກຈາກລາວ. ມີແຕ່ດຳເນີນແຜນການ ຫລອກລວງຄືແນວນີ້ ຈຶ່ງຈະເຂົ້າຢຶດຄອງປະເທດລາວ ໄດ້ຢ່າງງ່າຍດາຍ.

ຍ້ອນລະບອບສັກດິນາລາວ ອ່ອນເພຍເປັຍລ່ອຍ ຈົນບໍ່ສາມາດນຳພາປະຊາຊົນລາວລຸກຂຶ້ນຕໍ່ສູ້ ຕ້ານກັບພວກແຜ່ຂະຫຍາຍ ອານາເຂດຂອງສະຫຍາມໄດ້ດັ່ງນັ້ນ, ຈຶ່ງຫັນມາສະໜັບສະໜູນຈັກກະພັດຝຣັ່ງ ເພື່ອໃຫ້ປົດແອກຄອບຄອງ ຂອງສະຫຍາມອອກຈາກລາວ.ໂດຍສະເພາະ ເຈົ້າຊີວິດ ອຸ່ນຄຳ ທີ່ສະຫຍາມແຕ່ງຕັ້ງໃຫ້ຂຶ້ນເປັນເຈົ້າຊີວິດ ຫລວງພະບາງ ໃນປີ 1872 (ແທນ ເຈົ້າ ຈັນທະກຸມມານ ທີ່ສິ້ນພະຊົນ ເມື່ອປີ 1869). ເມື່ອຖືກຈັກກະພັດຝຣັ່ງ ໂດຍສະເພາະ ໂອ ກຸດປາວີ ເກ້ຍກ່ອມຂັນອາສາວ່າຝຣັ່ງມີກຳລັງພຽງພໍ ເພື່ອຮັກສາຄວາມສະຫງົບ ແລະ ປ້ອງກັນ ປະເທດລາວ ຈາກການຢຶດຄອງຂອງສະຫຍາມ ທະແມມແຕ່ເຊັນມອບສິດວ່າໃຫ້ຝຣັ່ງ ເປັນຜູ້ອາລັກຂາປະເທດລາວ. ເມື່ອເຈົ້າອຸ່ນຄຳ ໄດ້ຟັງການເກ້ຍກ່ອມຂອງຝຣັ່ງ ກໍ່ຫລົງເຊື່ອແລ້ວຈຶ່ງໄດ້ຕົກລົງເຊັນມອບສິດອຳນາດ ການປົກຄອງປະເທດລາວ ໃຫ້ຝຣັ່ງໃນ ວັນທີ 13 ມິຖຸນາ ປີ 1887.




ທ່ານ ອ. ປາວີ
ກັບຄະນະນັກສຳຫລວດຝຣັ່ງ
(ຜູ້ທີ1 ຂວາສຸດແຖວໜ້າ)
ຮູບຖ່າຍ ສະໄໝ 1893

ເມື່ອມາຮອດປີ 1888 ພວກລ່າເມືອງຂຶ້ນຝຣັ່ງ ກໍ່ໄດ້ເຄື່ອນກອງທັບ 2 ກອງ ຈາກ ອ່າວ ຕົງແກງ ເຂົ້າມາຢຶດເອົາລາວ ລຽບຕາມແມ່ນ້ຳດຳ ທາງເມືອງ ແຖງ (ດຽນບຽນຟູ) ແລະ ເສັ້ນ ທາງທິດຕາເວັນອອກ ຢຶດເອົາ 12 ຈຸໄທ ແລະ ເມືອງ ຊ່ອນ ໃນວັນທີ 17 ມັງກອນ ປີ 1888. ຫລັງຈາກນັ້ນ, ກໍ່ໄດ້ນຳໃຊ້ກຳລັງເຂົ້າບຸກຕີກອງກຳລັງຂອງສະຫຍາມ ທີ່ຢຶດເອົາດິນລາວ ຢູ່ແຕ່ ລະບ່ອນຂະຫຍາຍກວ້າງອອກເລື້ອຍໆ. ຍ້ອນວ່າທະຫານພື້ນເມືອງລາວ ທີ່ສັ່ງກັດຢູ່ກອງທັບສະ ຫຍາມ ເພື່ອຕ້ານກັບຝຣັ່ງ ບໍ່ຍອມຕໍ່ສູ້ຕາຍຕາງສະຫຍາມຈັກບ່ອນ ເຮັດໃຫ້ສະຫຍາມຕ້ອງເສຍ ທີ່ໝັ້ນທາງການທະຫານໃຫ້ຝຣັ່ງທຸກໆບ່ອນ ຢູ່ຝັ່ງຊ້າຍແມ່ນ້ຳຂອງ ນັບທັ້ງເກາະດອນຕ່າງໆ ໃນ ລຳແມ່ນ້ຳຂອງ. ດັ່ງນັ້ນ, ສະຫຍາມ ຊຶ່ງບໍ່ມີຫວັງຈະຢຶດຄອງລາວ ທັ້ງໝົດອັນກວ້າງໃຫຍ່ໄພ ສານ ແລະ ມີເນື້ອທີ່ຫລາຍກວ່າດິນ ຂອງປະເທດສະຫຍາມໄດ້ ຈຶ່ງມີແນວຄິດທັນເຂົ້າສູ່ການເຈ ລະຈາກັບຝຣັ່ງ ດ້ານໜຶ່ງພວກເຂົາຄິດວ່າ: ຖ້າຕັດແບ່ງດິນລາວອອກເຄິ່ງໜຶ່ງ ຈະເຮັດໃຫ້ປະຊາ ຊົນລາວ ອ່ອນກຳລັງລົງຈະລວມຕົວກັນບໍ່ໄດ້ ແລະ ຈະລຸກຂຶ້ນຕໍ່ສູ້ບໍ່ໄດ້ອີກ ແລະ ສະຫຍາມ ເອງກໍ່ຈະໄດ້ຄອບຄອງ ແລະ ສືບຕໍ່ກີດຂີ່ຂູດຮີດ ປະຊາຊົນລາວ ຢູ່ທາງຝັ່ງຂວາ ແມ່ນ້ຳຂອງ ຕະ ຫລອດການ. ດັ່ງນັ້ນ, ສະຫຍາມຈຶ່ງໄດ້ຕົກລົງປົງໃຈ ເຊັນສັນຍາກັບຝຣັ່ງ ໃນວັນທີ 3 ຕຸລາ ປີ 1893 ໂດຍມີຈັກກະພັດອັງກິດ ເປັນສັກຂີພິຍານຢູ່ເບື້ອງຫລັງ.

II. ການປະຕິບັດລັດທິລ່າເມືອງຂຶ້ນແບບເກົ່າ ຂອງຈັກກະພັດຝຣັ່ງ ໃນທົ່ວປະເທດລາວລ້ານຊ້າງ, ລວມທັງຢຶດເອົາ ນະຄອນຫລວງວຽງຈັນ ເປັນເມືອງເອກຂອງ ຣາຊະນອານາຈັກລາວ (1893 - 1954).

ເມື່ອຝຣັ່ງ ໄດ້ເຂົ້າຢຶດຄອງເອົາດິນແດນຂອງລາວ ທາງຝັ່ງຊ້າຍແມ່ນ້ຳຂອງ ແລະ ທາງຝັ່ງຂວາ ບາງຕອນ ໃນປີ 1893 ແລະ ປີ 1903 ແລ້ວ ຝຣັ່ງກໍ່ໂອນເອົາລາວເຂົ້າໃນອົງການປົກຄອງຂອງຝຣັ່ງ ຢູ່ອິນດູຈີນຝຣັ່ງເສດ, ຕັ້ງແຕ່ນັ້ນມາ ພວກເຂົາກໍ່ໄດ້ຈັດຕັ້ງ ລະບົບການປົກຄອງຢູ່ລາວຂຶ້ນ ເພື່ອດຳເນີນການກົດຂີ່ຂູດຮີດ ແລະ ປາບປາມປະຊາຊົນລາວຢູ່ແຕ່ລະທ້ອງຖິ່ນ.

ໃນຕອນທ້າຍ ຂອງສະຕະວັດທີ XIX ຈຶ່ງຖືວ່າ ເປັນໄລຍະຮຸ່ງເຮືອງຂອງພວກນາຍທຶນຕາເວັນຕົກຂະຫຍາຍອຳນາດ. ພວກຈັກກະພັດຝຣັ່ງ ທີ່ກຳລັງຍາດໄດ້ພາກກາງຂອງຫວຽດນາມ ຫຼື ດ້າຍຫວຽດ, ອານາມ, ກໍ່ເລີ່ມສ້າງຖານທີ່ໝັ້ນ ໂດຍເອົາໃຈໃສ່ພວກສັກດິນາທ້ອງຖິ່ນ ຕາມວິທີການຢຶດຄອງຂອງເຂົາ ຊຶ່ງມີເມືອງ ເວ້ (ອານາມ) ເມືອງ ໄຊ່ງ່ອນ (ໂກແຊງຈີນ) ແລະ ເມືອງ ຮ່າໂນ້ຍ (ຕິງແກງ) ເປັນທີ່ຈັ້ງ ເພື່ອກະກຽມກຳລັງຮຸກຮານເຂົ້າມາຫາອານາຈັກ ຫລວງພະບາງ, ອານາຈັກວຽງຈັນ ແລະ ອານາຈັກຈຳປາສັກ, ຊຶ່ງທັງສາມອານາຈັກທ້ອງຖິ່ນ ດັ່ງກ່າວ ຂອງລາວເຮົາເວລານັ້ນ ກໍ່ຕົກຢູ່ໃນສະພາບອ່ອນເພຍ ຍ້ອນການທຳລາຍມ້າງເພ ແລະ ກວດລ້າງເອົາ ປະຊາຊົນ ຜູ້ມີໄວອາຍຸອອກແຮງງານ ໄດ້ໄປເປັນຂະເລີຍເສິກ ແລະ ສ້າງສາພາກກາງຂອງສະຫຍາມໃຫ້ຮຸ່ງເຮືອງຢູ່ແລ້ວ ຈຶ່ງບໍ່ມີກຳລັງຫຍັງມາຕໍ່ສູ້ກັບພວກລ່າເມືອງຂຶ້ນຝຣັ່ງ. ຍິ່ງໄປກວ່ານັ້ນ, ສັກດິນາ ຫລວງພະບາງ ຊຶ່ງກຳລັງຖືກພວກ ຫ້ໍ ເຂົ້າທຳລາຍຮອດວັດວາອາຮາມ ຈົບລົງໃໝ່ໆ, ກໍ່ເລີຍເປັນໂອກາດຮຽກຮ້ອງ ໃຫ້ພວກລ່າເມືອງຂຶ້ນຝຣັ່ງ ມາປົກຄອງໂດຍຊົ່ນເຊີງຢ່າງບໍ່ມີການຕໍ່ສູ້ໃດໆ ເພາະພວກກອງທັບສະຫຍາມ ກໍ່ບໍ່ສາມາດຮັກສາຄວາມສະຫງົບໃຫ້ໄດ້.



ທຳນຽບຂອງຜູ້ສຳເລັດຣາ
ຊະການຝຣັ່ງປະຈຳລາວ
ຢູ່ນະຄອນຫຼວງວຽງຈັນ
ສ້າງໃນ ປີ 1901 ,
(ສະຖານທີ່ຂອງ
ທ້ຳ ໃນປະຈຸບັນ)

1. ລະບົບການຈັດຕັ້ງ, ການປົກຄອງແບບລ່າເມືອງຂຶ້ນຂອງຝຣັ່ງຢູ່ອິນດູຈີນ, ຝຣັ່ງເສດ ແລະ ຢູ່ລາວ.

- ໄລຍະທີໜຶ່ງ (1893 -1895).

ແຕ່ປີ 1893 ເຖິງປີ 1895 ພວກຝຣັ່ງໄດ້ໃຊ້ກົນອຸບາຍຮຸກຮານ ແລະ ຮັກສາຮູບການປົກຄອງສັກດິນາຢ່າງຮອບດ້ານ ເພື່ອເອົາໃຈພວກສັກດິນາລາວຕາມຄຳສັນຍາ ທີ່ທ່ານ ປາວີ ໄດ້ໃຫ້ໄວ້ກັບເຈົ້າຊີວິດອຸ່ນຄຳ. ດັ່ງນັ້ນ, ພວກເຂົາຈຶ່ງໄດ້ຢັ້ງຢືນແບບຈອມປອມ ຕໍ່ພວກສັກດິນາລາວ ວ່າລັດຖະບານຝຣັ່ງ ຮັບຮູ້ ແລະ ເຄົາລົບອຳນາດສິດ ແລະ ອະພິສິດຂອງ ພະບໍລົມ ວົງສານຸວົງ ແລະ ຮູບການປົກຄອງເດີມຂອງລາວທຸກຢ່າງ ຄືໃຫ້ເຈົ້າຊີວິດມີ ຫໍສະໜາມຫລວງ ຕາມແບບບູຮານລາວອັນປະກອບດ້ວຍ: ເຈົ້າ ອຸປະຫລາດ, ເຈົ້າ ລາຊະວົງ, ເຈົ້າ ລາຊະບຸດ, ເຈົ້າ ລາຊະສຳພັນທະວົງ, ເຈົ້າ ລາຊະພາຄີໃນ, ເຈົ້າ ກົມມະຊຸມ, ເຈົ້າ ກົມພະຄັງ, ເຈົ້າ ກົມຕຳຫລວດ, ເຈົ້າກົມມະແລງ, ເຈົ້າ ກົມມະຊ້າງ, ເຈົ້າ ກົມມະມ້າ, ເຈົ້າ ກົມມະນາ, ເຈົ້າ ກົມມະວັງ, ເຈົ້າ ກົມມະໜໍ, ເຈົ້າ ກົມອັກສອນ, ເຈົ້າ ກົມມະຫາເລັກ, ເຈົ້າ ກົມສີພາຍ, ເຈົ້າ ກົມດົນຕີ, ເຈົ້າ ພະຍາຫລວງ, ເມືອງ ຂວາ, ເມືອງ ຊ້າຍ, ເມືອງ ແສນ, ເມືອງ ຈັນ, ເມືອງ ກາງ, ພະຍາ, ເພຍ, ແສນ, ໜື່ນ, ທ້າວ ແລະ ການຈັດຕັ້ງປົກຄອງທ້ອງຖິ່ນກໍ່ມີແຂວງ, ເມືອງ, ບ້ານ ແລະ ພວກເຂົາຍັງໄດ້ຈັດຕັ້ງໃຫ້ມີຕາແສງຕື່ມອີກ ເພື່ອເອົາໃຈພວກສັກດິນາລາວ ແລະ ຫລອກລວງປະຊາຊົນລາວ.

- ພາຍຫລັງເຂົ້າຢຶດຄອງເອົາຝັ່ງຊ້າຍຂອງແມ່ນ້ຳຂອງ ແລ້ວພວກລ່າເມືອງຂຶ້ນຝຣັ່ງ ກໍ່ຮີບຮ້ອນເຊັນສັນຍາຮັບຮູ້ຊາຍແດນ ກັບປະເທດອ້ອມຂ້າງລາວໃນທັນທີ, ເພາະພວກເຂົາຖືເອົາບັນຫາການເຊັນສັນຍາເປັນສຳຄັນ. ເອກະສານສັນຍາໃຊ້ຮັບປະກັນ ຂອບເຂດດິນແດນທາງດ້ານກົດໝາຍ ຕໍ່ສາກົນທັງໃຊ້ເປັນການຢັ້ງຢືນ ໃນກໍລະນີຜິດພາດທີ່ອາດເກີດຂຶ້ນ ດ້ວຍສາເຫດໃດໜຶ່ງໄດ້, ສຳຄັນກວ່ານັ້ນ ແມ່ນມັນບົ່ງບອກຂອບເຂດພື້ນທີ່ ທີ່ເຂົາມີສິດຈັດຕັ້ງເຄື່ອນໄຫວ ທາງດ້ານການເມືອງ, ການປົກຄອງ, ການທະຫານ, ພາສີອາກອນ ແລະ ເສດຖະກິດ - ວັດທະນະທຳ - ສັງຄົມທົ່ວໄປ. ບົນພື້ນຖານຄວາມຮັບຮູ້ກ່ຽວກັບເສັ້ນຊາຍແດນ ໃນລະບອບທຶນນິຍົມ ທີ່ມີຄວາມແຕກຕ່າງກັນ ສະໄໝສັກດິນາໃນຫລາຍດ້ານຢ່າງເດັ່ນຊັດນັ້ນ ພວກລ່າເມືອງຂຶ້ນຝຣັ່ງ ຈຶ່ງເອົາໃຈໃສ່ຕໍ່ບັນຫາການເຊັນສັນຍາຕໍ່ຊາຍແດນ ຈີນ - ລາວ, ພະມ້າ - ລາວ ແລະ ສະຫຍາມ - ລາວ ຢ່າງບໍ່ຈຳເປັນ ຈະຕ້ອງຖາມຄວາມເຫັນ ກັບຜູ້ເປັນເຈົ້າຂອງປະເທດ ໃນເວລານັ້ນເລີຍ.

ພາຍຫລັງທີ່ພວກລ່າເມືອງຂຶ້ນຝຣັ່ງ ແລະ ສະຫຍາມໄດ້ຕົກລົງເຊັນສັນຍາແບ່ງດິນແດນລາວຕາມລຳພັງໃຈ ຂອງພວກເຂົາແລ້ວ, ດິນແດນລາວສ່ວນໃຫຍ່ທາງຝັ່ງຂວາແມ່ນ້ຳຂອງ ໄດ້ເປັນຂອງສະຫຍາມ, ສ່ວນທາງຝັ່ງຊ້າຍ ແລະ ສ່ວນໜຶ່ງຂອງ ແຂວງ ຈຳປາສັກ ແລະ ໄຊຍະບູລີ,

ຝຣັ່ງເປັນຜູ້ຢຶດຄອງເອົາເປັນຂອງລາວ. ດັ່ງນັ້ນ, ໃນສາມປະເທດ ໃນອິນດູຈີນລວມມີ 5 ແຄ້ວ ຄື: ແຄ້ວລາວ, ແຄ້ວກຳປູເຈຍ, ແຄ້ວໂກແຊງຈີນ, ແຄ້ວອານາມ ແລະ ແຄ້ວຕົງແກງ.

ໃນເວລາດິນແດນ ທັງ 5 ແຄ້ວ ຕົກຢູ່ໃນການຢຶດຄອງຂອງຝຣັ່ງນັ້ນ, ພວກເຂົາໄດ້ຕັດແບ່ງດິນແດນບາງສ່ວນຂອງແຄ້ວລາວ ໃຫ້ໄປຂຶ້ນກັບແຄ້ວອື່ນ ໃນອິນດູຈີນຝຣັ່ງເສດ, ຕາມ ລຳພັງໃຈຂອງເຂົາ ໂດຍບໍ່ເອົາຫົວຊາຕໍ່ເງື່ອນໄຂສັງຄົມ, ປະຫວັດສາດ, ຄວາມເປັນຊາດ ແລະ ແນວຄິດຈິດໃຈຂອງປະຊາຊົນລາວ ແຕ່ຢ່າງໃດ. ພວກເຂົາພຽງແຕ່ຍົກເຫດຜົນຂຶ້ນມາແກ້ຕົວວ່າ ຢູ່ທ້ອງຖິ່ນເຫລົ່ານັ້ນ ບໍ່ມີຄວາມສະຫງົບ ທັງຢູ່ຫ່າງໄກຈາກສູນກາງ ການປົກຄອງຂອງແຄ້ວ ລາວ. ເພື່ອສະດວກໃນການປົກຄອງ ພວກລ່າເມືອງຂຶ້ນຝຣັ່ງ ຈຶ່ງຕັດບາງທ້ອງຖິ່ນຂອງແຄ້ວ ລາວ ໄປຂຶ້ນກັບແຄ້ວອື່ນໆ ທີ່ໃກ ວ່າຄື: ເອົາສິບໂມ້, ເມືອງ ແສນ, ເມືອງ ກະຢາ, ເມືອງ ກອນ ກວາງ, ເມືອງ ໄລ່, ເມືອງ ລ້າ, ເມືອງ ແຖງ ໄປຂຶ້ນກັບຕົງແກງ, ເອົາເມືອງ ຢູແຕງ ໄປຂຶ້ນກັບ ກຳ ປູເຈຍ. ເອົາແຂວງ ຢາລາຍ - ກອນຕູມ ໄປຂຶ້ນກັບອານາມ. ນັ້ນແມ່ນກົນອຸບາຍອັນເລິກແລບ ຂອງເຂົາ ເພື່ອໃຫ້ພວກເຮົາຜິດຖຽງກັນບໍ່ໃຫ້ລົງລອຍກັນ ເພື່ອໃຫ້ເຂົາປົກຄອງໄດ້ໂດຍງ່າຍ.

ພື້ນຖານທາງດ້ານກົດໝາຍ ທີ່ກຳນົດການພົວພັນ ລະຫວ່າງຝຣັ່ງກັບລາວ ໃນເບື້ອງຕົ້ນ ຍັງບໍ່ມີການຕົກລົງກັນ ເປັນຕົ້ນບັນຫາການເຈລະຈາ ແລະ ເຊັນເອກະສານທາງການຕ່າງໆ ເພື່ອ ຮັບປະກັນສິດຂອບເຂດໜ້າທີ່ລະຫວ່າງສອງຝ່າຍ. ປີ 1894 ໂດຍເຫັນວ່າ ເຈົ້າ ອຸ່ນຄຳ ເຖົ້າແກ່ ຊະລາການຫລາຍປາວີ ຈຶ່ງສະເໜີໃຫ້ ເຈົ້າ ສັກກະລິນ ເຂົ້າມາຮັກສາຕຳແໜ່ງເຈົ້າຊີວິດແທນ.

ວັນທີ 5 ມິຖຸນາ ປີ 1894, ປາວີ ໄດ້ຖືກແຕ່ງຕັ້ງເປັນຜູ້ຕາງໜ້າລັດຖະບານຝຣັ່ງ ທັງເປັນ ທີ່ປຶກສາປະຈຳ ເຈົ້າ ສັກກະລິນ ໃນເດືອນ ກໍລະກົດ ປີດຽວກັນນີ້ ປາວີ ໄດ້ຈັດຕັ້ງແຂວງຕ່າງໆ ຄືນ ໂດຍໄດ້ທ້ອນໂຮມເອົາຫລາຍເມືອງເຂົ້າເປັນແຂວງ, ຫລາຍຕາແສງເຂົ້າເປັນເມືອງ, ຫລາຍ ບ້ານເຂົ້າເປັນຕາແສງ ໃຫ້ລະອຽດກວ່າເກົ່າ ຊຶ່ງເນື້ອແທ້ແມ່ນຈັດການປົກຄອງ ໃຫ້ມີຄວາມ ແໜ້ນໜາ, ແຕ່ວ່າເພື່ອປົກປິດເລກົນອັນເລິກແລບຂອງຕົນ, ປາວີ ຈຶ່ງໄດ້ໃຊ້ກົນອຸບາຍວ່າຖືກ ເອີ້ນກັບຄືນປະເທດ ແລະ ປະແຜນການນີ້ໄວ້ໃຫ້ຜູ້ໃໝ່ປະຕິບັດກ່ອນຈະກັບຄືນປະເທດ, ວັນທີ 19 ເມສາ ປີ 1895, ປາວີ ໄດ້ຣາຊາພິເສກ ເຈົ້າ ສັກກະລິນ ຂຶ້ນເປັນເຈົ້າຊີວິດແທນ ເຈົ້າ ອຸ່ນຄຳ ແລະ ວັນທີ 3 ທັນວາ ປີ 1895, ກໍ່ແນະນຳໃຫ້ ເຈົ້າ ສັກກະລິນ ເຊັນເອກະສານ (ກົງວັງຊົງ) ກັບ ເຈົ້າໜ້າທີ່ຝຣັ່ງ ເພື່ອບັນຍັດລະບອບລ່າເມືອງຂຶ້ນຝຣັ່ງຢູ່ລາວ. ວັນທີ 15 ທັນວາ ປີ 1895 ເຈົ້າ ອຸ່ນຄຳ ໄດ້ສິ້ນພະຊົນ ລວມອາຍຸໄດ້ 84 ປີ ປະລາຊະບັນລັງໃຫ້ລູກຊາຍກົກ ຜູ້ທີ່ຊື່ວ່າ ເຈົ້າ ສັກ ກະລິນ ສືບແທນຕຳແໜ່ງ ມາເປັນເວລາ 8 ເດືອນກວ່າແລ້ວ ຈຶ່ງແຕ່ງຕັ້ງ ເຈົ້າ ບຸນຄົງ (ລູກຂອງ ເຈົ້າ ສຸວັນນະພູມມາ) ເປັນເຈົ້າ ອຸປະຣາດ. ນັບແຕ່ນັ້ນມາ ຝຣັ່ງຖືວ່າຕົນໄດ້ສຳເລັດໃນການຈັດ

ວາງຄົນພື້ນຖານທີ່ບໍລິສຸດພຸດຜ່ອງຕໍ່ຝຣັ່ງ ແລະ ບັງຄັບໃຫ້ເຊັນເອກະສານກັບຝຣັ່ງ ເພື່ອສ້າງຕັ້ງ ລະບອບລ່າເມືອງຂຶ້ນໃສ່ປະເທດລາວຢ່າງ " ຖືກກົດໝາຍ " ແລະ ດ້ວຍຄວາມພໍໃຈອີກ ດ້ວຍ.

- ໄລຍະທີສອງ (1895 - 1899).

ເມື່ອ ປາວີ ເດີນທາງກັບຄືນປະເທດຝຣັ່ງ ໃນເດືອນ ທັນວາ ປີ 1895 ພວກລ່າເມືອງຂຶ້ນ ຝຣັ່ງກໍ່ໄດ້ແຕ່ງຕັ້ງ (Bouloz) ບຸໂລສ ເປັນຜູ້ສຳເລັດລາຊະການຢູ່ເມືອງລາວ ບຸໂລສ ມາເຖິງ ຫຼວງພະບາງ ແລ້ວກໍ່ເລີ່ມປົກຄອງດ້ວຍການເພີ່ມອິດສະລິຍະຍົດໃຫ້ແກ່ ເຈົ້າ ອຸປະຣາດ ມາຂຶ້ນ ເປັນສົມເດັດ ເຈົ້າ ມະຫາອຸປະຣາດ ແລ້ວໄດ້ປະກາດເລີກໃຊ້ກົດໝາຍເກົ່າ ຂອງສັກດິນາບາງ ສະບັບທີ່ຂັດກັບລະບົບການປົກຄອງໃໝ່ຂອງເຂົາ ເຊັ່ນ: ກົດໝາຍລາຊະທັມມະພິບານ, ສັກດິ ນາ, ທາດ ແລະ ໃນປີນີ້ຝຣັ່ງໃຫ້ເລີ່ມໃຊ້ຄິດຕະສັກກະລາດ (ຄ.ສ) ແບບຝຣັ່ງ.

ບຸໂລສ ເປັນຜູ້ປະຕິບັດແຜນການຂອງ ປາວີ ກ່ຽວກັບການລົບລ້າງລະບອບການປົກຄອງ ແບບສັກດິນາລາວ ແລະ ວາງແອກປົກຄອງໂດຍກົງຂອງຝຣັ່ງໃນທົ່ວປະເທດ ບຸໂລສ ໄດ້ແບ່ງ ປະເທດລາວ ອອກ ເປັນ 2 ເຂດບັນຊາ ແຕ່ລະເຂດມີຜູ້ສຳເລັດລາຊະການຂອງຕົນເອງ.

ເຂດພາກເໜືອປະເທດລາວ ຖືເປັນເຂດອາລັກຂາ ເອົາເມືອງ ຫລວງພະບາງ ເປັນໃຈ ກາງ ແລະ ມີແຂວງຕ່າງໆ ນັບຕັ້ງແຕ່ຄຳມ່ວນຂຶ້ນໄປ ເຊິ່ງລວມທັງໝົດມີ 6 ແຂວງ ແລະ ມີ ເມືອງຈຳນວນໜຶ່ງ ໄດ້ຖືກຕັດແບ່ງໃຫ້ຂຶ້ນກັບຕົງແກງ ແລະ ມີອີກຈຳນວນໜຶ່ງໄດ້ຖືກຕັດແບ່ງ (ຫົວພັນ) ໃຫ້ໄປຂຶ້ນກັບແຂວງ **ແທງຮ່ວາ.** ໂດຍຝຣັ່ງອ້າງວ່າ ເພື່ອຄວາມສະດວກໃນການປົກ ຄອງເຂດພາກໃຕ້ ຂອງປະເທດລາວ ເອົາເມືອງ ໂຂງ ເປັນໃຈກາງ ມີເຂດແດນຕັ້ງແຕ່ ຄຳມ່ວນ ລົງໄປເຖິງຊາຍແດນ ກຳປູເຈຍ ລວມທັງໝົດ ມີ 7 ແຂວງ, ລວມທັງແຂວງ ຊຽງແຕ່ງ, ຖືເປັນ ເຂດເມືອງຂຶ້ນໂດຍກົງ.

- ໄລຍະທີສາມ (1899 - 1941).

ກົງຈັກການປົກຄອງທີ່ຝຣັ່ງ ສ້າງຂຶ້ນໃນປີ 1899 ໄດ້ຢືນຍົງຄົງຕົວ ຈົນເຖິງປີ 1941 ເຂົາ ຈັດປະເທດລາວ ເປັນອານານິຄົມປະກອບດ້ວຍ 10 ແຂວງ, ໃນນັ້ນແຂວງ ຫລວງພະບາງ ມີຖາ ນະເປັນແຂວງ ທັງເປັນອານາຈັກນ້ອຍ ຮັກສາສາຍການຈັດຕັ້ງສັກດິນາ ອັນເປັນຖານະບໍ່ແຈ່ມ ແຈ້ງ ແລະ ເລື່ອນລອຍຕະຫລອດການ ເຊິ່ງນຳຜົນດີໃຫ້ແກ່ນະໂຍບາຍແບ່ງແຍກ ໃນການປົກ ຄອງຂອງຝຣັ່ງ.

ໃນວັນທີ 19 ສິງຫາ 1899 ໂປນດູແມ (Paul Douner) ຜູ້ສຳເລັດຣາຊການໃຫຍ່ ຝຣັ່ງ ປະຈຳອິນດູຈີນ ໄດ້ມີຄຳສັ່ງໃຫ້ຈັດເອົາລາວເຂົ້າເປັນແຄ້ວທີ 5 ຂອງສະຫະພັນອິນດູຈີນ. ໃນໄລຍະດຽວກັນ ນັ້ນປະຊາຊົນລາວ ໄດ້ພ້ອມກັນຕໍ່ສູ້ຢ່າງເປັນຂະບວນຟົດເດືອດ ເພື່ອຫວງໃຫ້

ທ້ອນໂຮມປະເທດລາວ ເຂົ້າເປັນອັນໜຶ່ງອັນດຽວກັນ ແຕ່ເໜືອຕະຫລອດໃຕ້ **ໂດຍເອົາວຽງຈັນ ເປັນນະຄອນຫລວງຄືເກົ່າ.** ຕໍ່ໜ້າການຕໍ່ສູ້ອັນນັບມື້ນັບກວ້າງຂວາງ ແລະ ແຂງແຮງດັ່ງກ່າວ ນັ້ນ, ໂດຍປະຕິບັດທິດສະດີ " ຢຶດຄອງລາວດ້ວຍການຢຶດຄອງເອົາໝາກຫົວໃຈຂອງຄົນລາວ " (ແປຈາກຊື່ປຶ້ມປາວີຂຽນໄວ້ວ່າ " A la Conquete tes coeurs " ທີ່ພວກລ່າເມືອງຂຶ້ນຝຣັ່ງ ວາງອອກນັ້ນ ໂປນດູແມ ຈຶ່ງຍອມຕົກລົງລວມເອົາປະເທດລາວ ທີ່ພວກເຂົາແບ່ງອອກເປັນ 2 ເຂດນັ້ນ ເຂົ້າເປັນປະເທດລາວອັນເປັນເອກະພາບ ໂດຍຕັ້ງວຽງຈັນເປັນ ນະຄອນຫລວງ ຄືເກົ່າ. ດັ່ງນັ້ນ, ພວກເຂົາກໍ່ໄດ້ດຳເນີນການກໍ່ສ້າງໂຮງການຕ່າງໆ ຂຶ້ນຢູ່ວຽງຈັນ ເມື່ອສ້າງສຳເລັດສ່ວນ ໃຫຍ່ແລ້ວ ພວກເຂົາກໍ່ຍົກມາຕັ້ງ ນະຄອນຫລວງ ຢູ່ວຽງຈັນ ໃນປີ 1899 ແລະ ໃນປີນີ້ເອງພວກ ເຂົາໄດ້ຈັດແບ່ງການປົກຄອງລາວອອກເປັນ 2 ສ່ວນຄື: ສ່ວນກາງ ແລະ ສ່ວນທ້ອງຖິ່ນໃຫ້ຖືກ ຕ້ອງຕາມລັກສະນະເປັນ " ລັດ " ຄືກັບແຄ້ວນອື່ນໆ ຂອງສະຫະພັນອິນດູຈີນຝຣັ່ງ.

ໃນການປົກຄອງສ່ວນກາງ ຂອງແຄ້ວນລາວ ພວກລ່າເມືອງຂຶ້ນຝຣັ່ງ ຖືວ່າປະເທດລາວ ເປັນ " ເມືອງຂຶ້ນ ຫລື ອານານິຄົມ ແຕ່ມີແຂວງໜຶ່ງມີ " ອະພິສິດ " ເປັນເມືອງ ອາລັກຂາ " ຄື ແຂວງ ຫລວງພະບາງ ປະມຸກຂອງແຄ້ວນລາວ ແມ່ນຄົນຝຣັ່ງຄືຜູ້ສຳເລັດຣາຊະການ ຝຣັ່ງປະ ຈຳແຄ້ວນລາວ ເຊິ່ງຖືວ່າເປັນຜູ້ມີອຳນາດສູງສຸດໃນທົ່ວແຄ້ວນລາວ ແລະ ສູງກວ່າເຈົ້າຊີວິດປະ ຈຳນະຄອນຫລວງ ພະບາງ ອີກດ້ວຍ.

ຜູ້ສຳເລັດຣາຊະການປະຈຳແຄ້ວນລາວ ມີສະພາທີ່ປຶກສາຣັດຖະການພຽງສະພາດຽວ ຄື ສະພາທີ່ປຶກສາຄົນພື້ນເມືອງ ເຊິ່ງມີໜ້າທີ່ໃຫ້ຄຳປຶກສາ ຕໍ່ຜູ້ສຳເລັດຣາຊະການສູງສຸດ ປະຈຳ ແຄ້ວນລາວ ຕາມແຕ່ຜູ້ສຳເລັດຣາຊະການຈະບົ່ງເລື່ອງມາໃຫ້ພິຈາລະນາ ແລະ ໃນແຄ້ວນລາວ ຍັງມີອະນຸສະພາການກະເສດ ນອກຈາກນັ້ນ ຍັງມີຄະນະກຳມະການເຕັກນິກຕ່າງໆ ເຊັ່ນດຽວ ກັບແຄ້ວນອື່ນໆ ໃນທົ່ວອິນດູຈີນ ອົງການຕ່າງໆ ເຫລົ່ານີ້ ມີໜ້າທີ່ໃຫ້ຄຳປຶກສາກ່ຽວກັບວຽກງານ ວິຊາສະເພາະ ຂອງຕົນແກ່ລັດຖະບານ.

ຕຳແໜ່ງຮອງລົງມາຈາກຜູ້ສຳເລັດຣາຊະການສູງສຸດ ມີ 15 ຕຳແໜ່ງ ຄື: 1 ຜູ້ກວດກາ ການປົກຄອງ ແລະ ການເມືອງ, 2 ຮອງຜູ້ສຳເລັດຣາຊະການສູງສຸດ, 3 ຫົວໜ້າກອງໄປສະນີ ໂທລະເລກ, 4 ຜູ້ບັນຊາການຕຳຫລວດ, 5 ຫົວໜ້າກອງການຄັງ, 6 ຫົວໜ້າກອງພາສີ, 7 ຫົວ ໜ້າກອງສາທາລະນະສຸກ, 8 ຫົວໜ້າກອງສັດຕະວະແພດ, 9 ຫົວໜ້າປ່າໄມ້ ແລະ ນ້ຳ, 10 ຫົວ ໜ້າກອງໂລຫະກິດ,[1]. 11 ຫົວໜ້າກອງກະເສດ,12 ຫົວໜ້າກອງໂຍທາທິການ,13 ຫົວໜ້າ ກອງທຳມະການ, 14 ຫົວໜ້າກອງທະບຽນຊັບສິນ, 15 ຫົວໜ້າພະແນກກອງກາງ ເຊິ່ງຕາມທຳ

---

1. ໝາຍເຖິງກອງຄົ້ນຄວ້າບໍ່ແຮ່.

ນະດາແລ້ວ ມີ 3 ຕຳແໜ່ງ, ໃນແຕ່ລະຕຳແໜ່ງດັ່ງກ່າວນັ້ນ, ແມ່ນຍັງມີເຈົ້າໜ້າທີ່ຮອງລົງມາຕາມສົມຄວນ.

ດ້ານການປົກຄອງສ່ວນທ້ອງຖິ່ນໃນແຄ້ວນລາວ, ພວກລ່າເມືອງຂຶ້ນຝຣັ່ງໄດ້ແບ່ງເຂດການປົກຄອງລາວ ໃນປີ 1899 ອອກເປັນ 10 ແຂວງ ຄື: 1 ແຂວງ ນະຄອນຫຼວງວຽງຈັນ, 2 ແຂວງ ຫລວງພະບາງ, 3 ແຂວງ ຊຽງຂວາງ, 4 ແຂວງ ຫົວພັນ, 5 ແຂວງ ຫົວຂອງ, 6 ແຂວງ ຜົ້ງສາລີ, 7 ແຂວງ ຄຳມ່ວນ, 8 ແຂວງ ສະຫວັນນະເຂດ, 9 ແຂວງ ສາລະວັນ, 10 ແຂວງ ຈຳປາສັກ.

ແຕ່ລະແຂວງນັ້ນມີເຈົ້າແຂວງຄົນຝຣັ່ງ ເປັນຜູ້ຮັບຜິດຊອບສູງສຸດໃນການປົກຄອງແຂວງ. ຕ່ຳກວ່າເຈົ້າແຂວງລົງມາແມ່ນຮອງເຈົ້າແຂວງຄົນຝຣັ່ງ ອາດຈະມີໜຶ່ງ ຫລື ສອງຄົນ ແລ້ວແຕ່ແຂວງໃຫຍ່ນ້ອຍ ຮອງເຈົ້າແຂວງ ແມ່ນເປັນຜູ້ຊ່ວຍເຈົ້າແຂວງ ຫລື ຮັກສາການແທນ ໃນເມື່ອເຈົ້າແຂວງເຮັດໜ້າທີ່ບໍ່ໄດ້, ຕ່ຳກວ່າຫົວໜ້າຫ້ອງການແຂວງ ແມ່ນຫົວໜ້າພະແນກເຊິ່ງມີ 9 ພະແນກ ຜູ້ຊ່ວຍວຽກຫົວໜ້າພະແນກແມ່ນລ່າມ, ສະໝຽນ ແລະ ພະນັກງານຕາມຈຳນວນທີ່ສົມຄວນພະແນກການປະຈຳແຕ່ລະແຂວງ ມີ 9 ພະແນກ ຄື:

1. ພະແນກ ຕຳຫລວດ (ທະຫານສື້ອ) [1]
2. ພະແນກ ໂຍທາທິການ
3. ພະແນກ ການເງິນ
4. ພະແນກ ການຄັງ
5. ພະແນກ ສັດຕະວະແພດ
6. ພະແນກ ສາທາລະນະສຸກ
7. ພະແນກ ໄປສະນີໂທລະເລກ
8. ພະແນກ ພາສີ
9. ພະແນກ ສຶກສາ.

ຫົວໜ້າພະແນກທັ້ງ 9 ນີ້ ບໍ່ມີສິດເປັນຄະນະກຳມະການປົກຄອງແຂວງ ເພາະວ່າການປົກຄອງແຂວງນັ້ນ ອຳນາດສຸດຂາດ ແມ່ນຂຶ້ນກັບເຈົ້າແຂວງຄົນຝຣັ່ງພຽງຜູ້ດຽວ ສ່ວນຫົວໜ້າພະແນກການເຫລົ່ານີ້ ແມ່ນມີໜ້າທີ່ຮັບຜິດຊອບແຕ່ພາຍໃນພະແນກ ແລະ ວິຊາສະເພາະຂອງຕົນເທົ່ານັ້ນ, ຂ້າຣາຊະການປະຈຳແຕ່ລະແຂວງນັ້ນ ນອກຈາກຄົນຝຣັ່ງແລ້ວກໍ່ມີຄົນລາວ, ຄົນຫວຽດນາມ ແລະ ຄົນກຳປູເຈຍຮ່ວມນຳ; ສ່ວນຫລາຍແມ່ນຊາວຫວຽດນາມເປັນຫົວໜ້າ.

---

1. ເບິ່ງດ້ວຍຜ້າພັນແຄ່ງສີສື້ວ, ໝາຍເຖິງສີຟ້າ.


2. ລະບົບການຈັດຕັ້ງ ຂ້າຣາຊະການຄົນພື້ນເມືອງ ຢູ່ນະຄອນຫລວງວຽງຈັນ.

- ເຈົ້າລາຊະພາຄີໃນ.


ນະຄອນວຽງຈັນ ເຄີຍເປັນເມືອງຫລວງເກົ່າຂອງລາວ ທີ່ຖືກສະຫຍາມ ເຜົ້າຜານຈົນຣາບກ້ຽງ ປະຊາຊົນກໍ່ຖືກກວາດລ້າງໄປໄທ ຈົນເກືອບວ່າບໍ່ຍັງເຫຼືອ ເມື່ອພວກລ່າເມືອງຂຶ້ນຝຣັ່ງເຂົ້າມາປົກຄອງລາວ ພວກເຂົາໄດ້ໃຊ້ເມືອງອື່ນເປັນນະຄອນຫລວງແທນເຊັ່ນ: ຫຼວງພະບາງ ແລະ ສະຫວັນນະເຂດ ແຕ່ປະຊາຊົນລາວ ໂດຍສະເພາະ ຊາວນະຄອນຫຼວງວຽງຈັນ ໄດ້ຮຽກຮ້ອງໃຫ້ຟື້ນຟູນະຄອນວຽງຈັນ ເປັນນະຄອນຫຼວງ ຂອງລາວຄືນຄືເກົ່າ, ພວກເຂົາຈຶ່ງໄດ້ກໍ່ສ້າງຟື້ນຟູຄືນນັບແຕ່ປີ1899 ມາແຕ່ບໍ່ມີເຈົ້າປົກຄອງເມືອງຄືກັບ ຫລວງພະບາງ ແລະ ຈຳປາສັກ ດັ່ງນັ້ນ ຝຣັ່ງຈຶ່ງເອົາ ເຈົ້າ ເພັດຊະຣາດ ເປັນເຈົ້າປົກຄອງເມືອງວຽງຈັນ ໃນປີ 1914 ແລະ ໄດ້ຍົກຕຳແໜ່ງໃຫ້ເປັນ **ເຈົ້າ ຣາຊະພາຄີໃນ** ວ່າເປັນຕຳແໜ່ງຂອງຄົນພື້ນເມືອງທີ່ສູງສຸດ ໃນນະຄອນຫລວງວຽງຈັນ ນອກຈາກນີ້, ເຈົ້າ ເພັດຊະຣາດ ຍັງໄດ້ຮັບຕຳ່ແໜ່ງປະຈຳໃນຄະນະລັດຖະບານແຄ້ວນລາວ ອີກຕຳແໜ່ງໜຶ່ງເອີ້ນວ່າຜູ້ກວດກາການເມືອງ ແລະ ການປົກຄອງສຳລັບຄົນພື້ນເມືອງ ໃນແຄ້ວນລາວ ຕ່ຳແໜ່ງນີ້ມີອຳນາດໜ້າທີ່ໃນການດູແລ, ກວດກາຄວາມທຸກສຸກຂອງປະຊາກອນໃນແຄ້ວນລາວ ແລະ ກວດກາເບິ່ງວຽກງານຂອງເຈົ້າເມືອງ ແລະ ສານ ໃນແຄ້ວນລາວ. ເຈົ້າ ເພັດຊະຣາດ ຍັງມີສິດແຕ່ງຕັ້ງຍົກຍ້າຍຖອດຖອນຂ້າຣາຊະການໄດ້ ໃນທົ່ວແຄ້ວນລາວ ໂດຍຄວາມເຫັນດີຂອງຜູ້ສຳເລັດຣາຊະການສູງສຸດຝຣັ່ງ ປະຈຳແຄ້ວນລາວອີກ.

- ເຈົ້າເມືອງ ແລະ ພະນັກງານປະຈຳເມືອງ.


ນະຄອນຫລວງວຽງຈັນ ມີເມືອງຂຶ້ນກັບ 5 ເມືອງຄື: ເມືອງ ປາກຊັນ, ເມືອງ ທຸລະຄົມ, ເມືອງ ວັງວຽງ, ເມືອງ ຊະນະຄາມ ແລະ ເມືອງ ວຽງຈັນ. ແຕ່ລະເມືອງ ຝຣັ່ງໄດ້ແຕ່ງຕັ້ງໃຫ້ມີເຈົ້າເມືອງ ໂດຍເອົາຄົນພື້ນເມືອງລາວ ຢູ່ບ່ອນນັ້ນເປັນຜູ້ທີ່ " ບອກໄດ້ໃຊ້ຟັງ" ແຕ່ຕ້ອງແມ່ນຜູ້ສຳເລັດຣາຊະການສູງສຸດ ປະຈຳແຄ້ວນລາວເປັນຜູ້ແຕ່ງຕັ້ງ ໂດຍຄວາມເຫັນຊອບຂອງເຈົ້າ ຣາຊະພາຄີ ໃນ ແລະ ເຈົ້າແຂວງ ຄົນຝຣັ່ງ ຢູ່ນະຄອນຫລວງວຽງຈັນ ຕຳແໜ່ງຕ່ຳກວ່າເຈົ້າເມືອງລົງມາແມ່ນ ອຸປະຣາດ ແລະ ມີຜູ້ຊ່ວຍອີກຜູ້ໜຶ່ງ ຫລື ສອງຄົນ ແລະ ມີສະໝຸນພະນັກງານອີກຕາມສົມຄວນ, ສ່ວນການແຕ່ງຕັ້ງ ກໍ່ຄືກັບການແຕ່ງຕັ້ງເຈົ້າເມືອງ ໜ້າທີ່ຂອງເຈົ້າເມືອງ ແລະ ອຸປະຣາດ ຫລື ຜູ້ຊ່ວຍແມ່ນເກັບພາສີຄ່າຫົວ ເກນເອົາຄົນລາວໄປເປັນກູລີຂຸດທາງ, ເກັບເກນທະຫານ, ປາບປາມຜູ້ຮັກຊາດ ທີ່ຕ້ານກັບຝຣັ່ງ ແລະ ວຽກກິດຈະການເລັກໆນ້ອຍໆຕ່າງໆ ໃນເຂດເມືອງຂອງຕົນຕາມຄຳສັ່ງຂອງຝຣັ່ງ ແລະ ມີໜ້າທີ່ກວດກາທ້ອງຖິ່ນ, ຊີ້ແຈງລະບຽບຣາຊະການ, ປຸກລະດົມປະຊາຊົນໃຫ້ເຮັດຕາມຄຳສັ່ງຂອງຝຣັ່ງ.



ຝຣັ່ງເກນເອົາປະຊາຊົນ ລາກແກ່ຊົ້ນສ່ວນເຮືອເຫລັກ ແຕ່ກຳປູເຈຍ ຂຶ້ນເທິງຄອນພະເພັ້ງ ແຂວງ ຈຳປາສັກ ຕາມລຳ ລິດໄຟ, ເພື່ອປະກອບເປັນພາຫະນະ ລຳລຽງ ຂົນສົ່ງ ຂົນເອົາຊັບພະຍາກອນຈາກພາກເໜືອຂອງລາວໄປຝຣັ່ງ



ຝຣັ່ງ ເກນເອົາ ປະຊາຊົນ ຕຳດິນ (ແທນລິດໂລຢຸ່ງບດິນ) ສ້າງທາງ



ປະຊາຊົນລາວຖືກເກນໄປເປັນ ກຸລີ ກໍ່ສ້າງທາງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ພວກລ່າ
ເມືອງຂຶ້ນໃນການຢຶດຄອງ ແລະ ລຳລຽງຊັບພະຍາກອນທີ່ຂຸດຄົ້ນ ໄດ້ຈາກລາວສົ່ງໄປຝຣັ່ງ



ຝຣັ່ງເກນເອົາປະຊາຊົນຂົນຖ່ຽເມ ໄປສະນີ

ຜູ້ເປັນເຈົ້າເມືອງ ນອກຈາກຈະໄດ້ຮັບເງິນເດືອນແລ້ວ ຍັງໄດ້ຮັບຍົດເປັນພະຍາ ຫລື ເຈົ້າພະຍາຫລວງ ແລະ ໄດ້ຮັບຄຳຊອບຕາມທີ່ຜູ້ສຳເລັດຣາຊະການຝຣັ່ງເຫັນດີ. ເຈົ້າເມືອງ ແລະ ພະນັກງານເມືອງ ນອກຈາກຈະໄດ້ຮັບເງິນເດືອນ ແລ້ວຍັງໄດ້ຮັບການຍົກເວັ້ນພາສີ ແລະ ຄ່າທຳນຽມທຸກຢ່າງ ແລະ ຍົກເວັ້ນການເກນແຮງງານທຸກປະເພດ.

- ຕາແສງ

ຕາແສງແມ່ນຕຳແໜ່ງໃໝ່ທີ່ພວກຝຣັ່ງແຕ່ງຕັ້ງຂຶ້ນ, ແຕ່ກ່ອນແມ່ນບ້ານຂຶ້ນກັບເມືອງໂດຍກົງ. (ຍ້ອນປະຊາກອນບໍ່ຫລາຍ, ຖືກໄທກວາດລ້າງເອົາໜີໄປເປັນຂະເລີຍ) ຕາແສງໄດ້ຮັບການເລືອກຕັ້ງຈາກພໍ່ບ້ານ ທີ່ສັງກັດໃນເຂດຕາແສງນັ້ນໆ ໂດຍການຮັບ ຮອງຂອງເຈົ້າເມືອງ. ໜ້າທີ່ຂອງຕາແສງແມ່ນເຮັດໃຫ້ປະຊາຊົນ ໃນເຂດຕາແສງຂອງຕົນປະຕິ ບັດຖືກຕ້ອງຕາມລະບຽບກົດໝາຍຂອງຝຣັ່ງ ໂດຍເກັບເງິນພາສີອາກອນທຸກຢ່າງ ຈາກປະຊາຊົນ, ເກນແຮງງານປະຊາຊົນແລ້ວ ຈັດແບ່ງໄປຮັບໃຊ້ວຽກງານຕາມຄຳສັ່ງຂອງຝຣັ່ງ ແລະ ປາບປາມປະຊາຊົນຜູ້ຮັກຊາດທີ່ຕໍ່ຕ້ານຝຣັ່ງ.

- ພໍ່ບ້ານ

ພໍ່ບ້ານ ແມ່ນຕຳແໜ່ງຕ່ຳກວ່າຕາແສງ (ຫລາຍພໍ່ບ້ານມີຕາແສງຜູ້ໜຶ່ງ) ເຊິ່ງປະຊາຊົນພາຍໃນບ້ານ ເປັນຜູ້ເລືອກຂຶ້ນ ແລ້ວໄດ້ການຮັບຮອງຈາກເຈົ້າເມືອງ. ພໍ່ບ້ານ ມີໜ້າທີ່ເກັບກຳ ແລະ ນຳພາປະຊາຊົນ ປະຕິບັດທຸກວຽກງານພາຍໃນບ້ານຂອງຕົນ ຕາມຄຳສັ່ງຂອງຕາແສງ. ຕາແສງ ແລະ ພໍ່ບ້ານບໍ່ມີເງິນເດືອນແຕ່ວ່າ ຖືກຍົກເວັ້ນຈາກການເສຍພາສີອາກອນ ແລະ ຈາກການເກນແຮງງານທຸກຢ່າງ. ນອກຈາກນັ້ນ, ຕາແສງ ແລະ ພໍ່ບ້ານຈະໄດ້ຮັບຍົດຈາກຜູ້ສຳເລັດຣາຊະການສູງສຸດປະຈຳແຄ້ວນລາວໃຫ້ເປັນໝື່ນ, ແສນ, ເພຍ, ພະຍາຕາມຄວາມບໍລິສຸດຕໍ່ລັດທິລ່າເມືອງຂຶ້ນຝຣັ່ງ.

3. ລະບົບການຈັດຕັ້ງ ທີ່ເປັນເຄື່ອງມືປາບປາມ ຊາວນະຄອນຫລວງວຽງຈັນ

ໄປພ້ອມໆກັບການປັບປຸງ ແລະ ກໍ່ສ້າງອຳນາດບໍລິຫານນັ້ນພວກລ່າເມືອງຂຶ້ນຝຣັ່ງ ໄດ້ເອົາໃຈໃສ່ໃນການກໍ່ສ້າງ ແລະ ປັບປຸງເຄື່ອງມືປາບປາມປະຊາຊົນຄືກໍ່ສ້າງ ແລະ ປັບປຸງກຳລັງຕຳຫລວດ ແລະ ອຳນາດຕຸລາການ.

- ກຳລັງຕຳຫລວດ.

ພວກລ່າເມືອງຂຶ້ນຝຣັ່ງ ຖືວ່າກຳລັງຕຳຫລວດແມ່ນກຳລັງຕົ້ນຕໍ ໃນການຮັກສາຄວາມສະຫງົບ ແລະ ປາບປາມ ຖືກກົດໝາຍ ຢູ່ພາຍໃນ ດັ່ງນັ້ນພວກເຂົາຈຶ່ງໄດ້ເອົາໃຈໃສ່ຈັດວາງກຳລັງຕຳຫລວດໄວ້ ຢ່າງທົ່ວເຖິງແຕ່ຂັ້ນ ແຂວງລົງຮອດຂັ້ນພື້ນຖານ.

ຕຳຫລວດຮັກສາເມືອງ ຫລື ທະຫານສີ້ວ, ເວລານັ້ນວຽງຈັນເປັນເມືອງໃຫຍ່ ແລະ ສຳຄັນມີປະຊາກອນບໍ່ເຖິງ 20.000 ຄົນ ເຖິງປານນັ້ນ. ດັ່ງນັ້ນ, ຝຣັ່ງຍັງຈັດຕັ້ງກຳລັງຕຳຫລວດ ຮັກສາເມືອງມີ 1 ກອງພັນ ໂດຍເອົານາຍທະຫານ ກອງໜູນຄົນຝຣັ່ງ ມາເປັນຜູ້ບັງຄັບບັນຊາກອງພັນ, ສ່ວນລູກນ້ອງ ຫລື ພົນຕຳຫລວດສ່ວນຫຼາຍ ແມ່ນຄົນຫວຽດນາມ ຜູ້ທີ່ເຂົ້າບອກໄດ້ໃຊ້ຟັງທີ່ສຸດ ແລະ ມີຄົນລາວປະສົມແດ່ເລັກນ້ອຍ, ຊຶ່ງມີໜ້າທີ່ປາບປາມປະຊາຊົນຜູ້ ທີ່ຕ້ານຝຣັ່ງ, ສືບສວນຄະດີ, ຄວບຄຸມຄຸກ, ຄຸມນັກໂທດໄປເຮັດວຽກ ແລະ ມີໜ້າທີ່ຍາມຮັກສາສະຖານທີ່ລັດຖະບານ, ເຮືອນພັກຂອງຂ້າຣາຊະການຂັ້ນສູງ.

ຕຳຫລວດສັນຕິບານ ຢູ່ນະຄອນຫຼວງວຽງຈັນມີ 1 ກອງ, ກອງຈຳນວນພົນປະມານ 48 ຄົນ ເອົານາຍທະຫານກອງໜູນຄົນຝຣັ່ງເປັນຜູ້ບັງຄັບບັນຊາ, ມີໜ້າທີ່ສອດແນມເບິ່ງຄົນລາວວ່າ ຊື່ສັດຕໍ່ຝຣັ່ງ ຫລື ບໍ່, ສືບສວນຄະດີຊັ້ນຕົ້ນ, ນຳຄະດີຂຶ້ນສູ່ສານແຂວງ, ປາບປາມຜູ້ທີ່ເຮັດຜິດກົດໝາຍໃນເຂດຕົວເມືອງ, ຕິດຕາມ ແລະ ປະກອບເອກະສານ ເພື່ອຈັບກຸມຜູ້ທີ່ເຂົ້າສົງໃສວ່າ ເປັນຄອມມູນິດ.

ຕຳຫລວດກຳແພງນະຄອນ ແມ່ນຕຳຫລວດປາບປາມ ຫລື ກອງປາບ ທີ່ຢູ່ໃນການບັງຄັບບັນຊາຂອງນາຍຕຳຫລວດທີ່ເປັນຄົນຝຣັ່ງ ທີ່ບັນຊາກອງຕຳຫລວດຮັກສາເມືອງ, ມີໜ້າທີ່ຮັກສາຄວາມປອດໄພໃນສະຖານທີ່ ສາທາລະນະປາບປາມປະຊາຊົນ ພາຍໃນບໍລິເວນຕົວເມືອງຕາມຄຳສັ່ງທຸກຢ່າງຂອງຂັ້ນເທິງຂອງພວກເຂົາ. ພວກນີ້ໄດ້ສ້າງໂທດກຳໃນການຈັບກຸມຄຸມຂັງ ແລະ ເຂັ່ນຂ້າປະຊາຊົນຜູ້ຮັກຊາດ ຢ່າງຫລວງຫລາຍ.

- ຕຳຫລວດບ້ານ ຫລື ປາກຕີຊັງ ທຽບເທົ່າກອງຫລອມ ເຊິ່ງເກນມາຈາກລາດສະດອມຊາຍສະກັນຢູ່ແຕ່ລະທ້ອງຖິ່ນ ໂດຍມີການຜັດປ່ຽນກັນຜູ້ລະ 15 ມື້ເຖິງ 1 ປີ, ມີການປະກອບປືນຜູ້ລະ 1 ບອກ ພ້ອມດ້ວຍລູກປືນ 10 ລູກ. ມີໜ້າທີ່ກວດກາຮັກສາຄວາມປອດໄພໃນທ້ອງຖິ່ນຂອງຕົນ, ຕຳຫລວດບ້ານບໍ່ມີເຄື່ອງແບບ ແລະ ບໍ່ມີລະບຽບວິໄນຄືກັບຕຳຫລວດ ປະເພດອື່ນ. ຕຳຫລວດບ້ານ ແມ່ນຢູ່ໃນຄວາມຄວບຄຸມຂອງເຈົ້າເມືອງ ຫລື ຕາແສງ ຫລື ພໍ່ບ້ານ ແລ້ວແຕ່ຄວາມເໝາະສົມ.

- ອຳນາດຕຸລາການ.

ອຳນາດຕຸລາການ ຫລື ສານ ຫລື ພວກເຂົາເອີ້ນວ່າວຽກງານ " ຍຸດຕິທຳ " ນັ້ນແມ່ນເປັນເຄື່ອງມືປາບປາມປະຊາຊົນລາວ ກໍ່ຄືຊາວນະຄອນຫລວງວຽງຈັນ. ນັບແຕ່ ປີ 1908 ເປັນຕົ້ນມາ ໄປຄຽງຄູ່ກັບການນຳໃຊ້ກຳລັງຕຳຫລວດ ແລະ ທະຫານນັ້ນ ພວກລ່າເມືອງຂຶ້ນຝຣັ່ງໄດ້ອອກຂໍ້ຕົກລົງກຳນົດສ້າງຕັ້ງສານທ້ອງຖິ່ນ ແລະ ປະກາດນຳໃຊ້ບັນດາກົດໝາຍຈຳນວນໜຶ່ງ ຢູ່

ລາວ ຄື: ກົດໝາຍແພ່ງ, ກົດໝາຍອາຍາ, ກົດໝາຍດຳເນີນຄະດີແພ່ງ ແລະ ອາຍາ, ກົດໝາຍ ຄ້າຂາຍ.

ທັງໝົດລະບົບການຈັດຕັ້ງປົກຄອງ, ລະບົບເຄື່ອງມືປາບປາມ ແລະ ລະບົບກົດໝາຍທີ່ ກ່າວມານັ້ນ ມັນແມ່ນເຄື່ອງມືຜັນຂະຫຍາຍນະໂຍບາຍ ລ່າເມືອງຂຶ້ນແບບເກົ່າ ຂອງຈັກກະພັດ ຝຣັ່ງ ທີ່ປະຕິບັດໂດຍກົງຕໍ່ຊາດ ແລະ ປະຊາຊົນລາວ ກໍ່ຄືຊາວນະຄອນຫລວງວຽງຈັນພວກເຮົາ.

4.ຜົນສະທ້ອນຂອງນະໂຍບາຍລັດທິລ່າເມືອງຂຶ້ນແບບເກົ່າ ຕໍ່ຊາວນະຄອນຫຼວງວຽງຈັນ.

ພາຍຫລັງໄດ້ຄຸ້ມຄອງ ແລະ ຈັດຕັ້ງລະບົບການປົກຄອງລາວສຳເລັດແລ້ວ ພວກຈັກກະ ພັດຝຣັ່ງ ໄດ້ດຳເນີນນະໂຍບາຍລັດທິລ່າເມືອງຂຶ້ນຕໍ່ປະຊາຊົນລາວ ກໍ່ຄືຊາວນະຄອນວຽງຈັນ.

ດ້ານການເມືອງ ປະຊາຊົນເຮົາ ບໍ່ມີສິດເສລີພາບຫຍັງ ເພາະຝຣັ່ງໄດ້ອອກກົດໝາຍຫ້າມ ຄົນລາວທ້ອນໂຮມກັນເປັນອົງການຈັດຕັ້ງ ຫຼື ສະມາຄົມຄົນລາວ,ບໍ່ມີສິດເສລີພາບໃນການໂຮມ ຊຸມນຸມ, ບໍ່ມີສິດປາກເວົ້າ, ຂີດຂຽນ ແລະ ໄປມາຫາສູ່ກັນ ໂດຍບໍ່ໄດ້ຮັບອະນຸຍາດຈາກຝຣັ່ງ.

ດ້ານພາສີອາກອນ ພວກເຂົາບັງຄັບໃຫ້ເສຍຄ່າສ່ວຍສາອາກອນທີ່ບໍ່ເປັນທຳ, ຝຣັ່ງເກັບ ເອົາຄ່າຫົວຄົນທີ່ມີ ອາຍຸ 18 ປີ ຂຶ້ນໄປແຕ່ລະຄົນຕ້ອງໄດ້ເສຍເປັນປະຈຳທຸກໆປີ, ເສຍພາສີ ເຮືອນ, ຄ່າດິນປຸກສ້າງ ແລະ ຄ່າຜະລິດຜົນ, ຄ່າລາຍໄດ້, ຄ່າລ້ຽງສັດ, ຄ່າຍົກເວັ້ນບໍ່ໄປເປັນທະ ຫານ, ຕຳຫລວດ, ຄ່າກວຽນ ແລະ ສັດລາກແກ່, ຄ່າປູກ ແລະ ຂາຍຢາຝິ່ນ, ຄ່າຜະລິດ ແລະ ດື່ມເຫລົ້າ, ຄ່າຜະລິດເກືອ, ຄ່າເຄື່ອງປ່າຂອງດົງ ແລະ ອື່ນໆ. ນອກຈາກນັ້ນ, ພົນລະເມືອງລາວ ແລະ ຊາວນະຄອນຫຼວງວຽງຈັນ ຍັງໄດ້ທົນທຸກຕໍ່ການເກັບພາສີພິເສດຕື່ມອີກ ເພື່ອຊ່ວຍຄັງຫຼວງ ເປັນປະຈຳທຸກໆປີ.

ດ້ານແຮງງານ ພົນລະເມືອງຜູ້ຊາຍ ມີອາຍຸ 18 ປີ ຂຶ້ນໄປຖືກບັງຄັບໃຫ້ໄປອອກແຮງງານ ໜັກໃນປີໜຶ່ງ ຢ່າງໜ້ອຍກໍ່ 100 ມື້ ຄື: ຖືກເກນໄປສ້າງຖະໜົນຫົນທາງ, ສະໜາມບິນ, ສ້າງ ເຮືອນຊານ, ຫ້ອງການສຳນັກງານ, ສ້າງປົດຄ້າຍທະຫານ ແລະ ຖືກເກນໃຫ້ໄປແບກຫາບສິ່ງ ເຄື່ອງຂອງຕາມຈຸດຕ່າງໆ ຕາມຄຳສັ່ງຂອງພວກລ່າເມືອງຂຶ້ນຝຣັ່ງ. ພ້ອມນັ້ນ ພົນລະເມືອງລາວ ຍັງໄດ້ຖືກບັງຄັບໃຫ້ເສຍຄ່າພັກວຽກງານອີກ 40 ວັນຕໍ່ປີ. (1)

ຄ່າພັກ 40 ວັນຕໍ່ປີ: ແມ່ນວິທີແກ້ບັນຫາທີ່ຄົນລາວສ່ວນໃຫຍ່ມັກພັກທຳບຸນຕ່າງໆ ຂອງທ້ອງຖິ່ນ ຕາມປະເພນີ, ມັກພັກສ່ວນບຸກຄົນ ແລະ ພັກຕາມສະໝັກໃຈ ໂດຍບໍ່ມີເຫດຜົນ, ອຳນາດຝຣັ່ງຈຶ່ງສະຫລຸບເອົາ 40 ວັນໃຫ້ພັກແຕ່ເສຍ ເງິນ (ລາຄາຕົກປະມານ ຄວາຍ 4 ໂຕ ເວລານັ້ນ).

ພົນລະເມືອງບໍ່ພຽງແຕ່ຖືກທົນທຸກທໍລະມານ ຈາກການກົດຂີ່ຂູດຮີດຂອງອົງການປົກຄອງຝຣັ່ງເທົ່ານັ້ນ ແຕ່ຫາກຍັງໄດ້ຖືກກົດຂີ່ຂົ່ມເຫັງອີກຫຼາຍດ້ານ ຢ່າງໜັກໜ່ວງຈາກເຈົ້າເມືອງ ແລະ ຕາແສງ ຊຶ່ງໄດ້ສວຍໂອກາດເກັບຄ່າສ່ວຍເພີ່ມເອົາເອງຈາກຊາວໄຮ່ນາ ໃນຂອບເຂດທີ່ຕົນປົກຄອງ ພ້ອມນັ້ນ ກໍ່ຍັງໄດ້ໃຊ້ແຮງງານປະຊາຊົນ ເພື່ອກິດຈະການຂອງພວກຕົນຕະຫລອດໄລຍະແຫ່ງການຄອບຄອງຂອງຈັກກະພັດຝຣັ່ງ.

ດ້ານການສຶກສາ ພວກລ່າເມືອງຂຶ້ນຝຣັ່ງປົກຄອງລາວ ກໍ່ຄືປົກຄອງນະຄອນຫຼວງວຽງຈັນນັ້ນ, ພວກເຂົາບໍ່ໄດ້ເອົາໃຈໃສ່ ໃນການຂະຫຍາຍການສຶກສາ ພວກເຂົາໄດ້ສ້າງໂຮງຮຽນ ຈຳນວນໜ້ອຍດຽວ ເຊິ່ງມີໜ້າທີ່ກໍ່ສ້າງລູກຫຼານຂ້າຣາຊະການ ຜູ້ທີ່ບອກໄດ້ໃຊ້ຟັງ ຂອງພວກເຂົາເທົ່ານັ້ນ, ປີ 1902 ແມ່ນປີທຳອິດ ທີ່ພວກລ່າເມືອງຂຶ້ນຝຣັ່ງ ໄດ້ລົງທຶນເລັກໜ້ອຍໃສ່ວຽກງານການສຶກສາ ພຽງແຕ່ 6.000 ກີບ (2% ຂອງງົບປະມານທັງໝົດ) ໃນເວລານັ້ນ ມີໂຮງຮຽນພຽງ 2 ຫລັງ ຄືຢູ່ວຽງຈັນ ແລະ ຫລວງພະບາງ. ເຖິງປີ 1930 ຈຶ່ງມີໂຮງຮຽນ ປະຖົມ 3 ປີ (ມຸລະປະຖົມ ເພີ່ມຂຶ້ນເປັນ 66 ແຫ່ງ ສ່ວນໃຫຍ່ແມ່ນໂຮງຮຽນ ມຸລະປະຖົມ ມີນັກຮຽນທັງໝົດ 5.793 ກວ່າຄົນ. ໃນນັ້ນ, ມີຄົນລາວ 2.396 ຄົນ ເທລືອນັ້ນ ແມ່ນຊາວຫວຽດນາມ ສ່ວນຫລາຍແມ່ນລູກຫລານຂອງຂ້າຣາຊະການຮັບໃຊ້ຝຣັ່ງ ຈຶ່ງມີເງື່ອນໄຂໄດ້ເຂົ້າຮຽນ, ປີ 1938 ງົບປະມານໃສ່ການສຶກສາມີ 30.100 ກີບ, ຫລັກສູດການຮຽນແມ່ນປະຕິບັດຕາມຫລັກ ສູດທີ່ໃຊ້ຢູ່ຝຣັ່ງ ພ້ອມທັງບັງຄັບໃຫ້ດູຖູກນິ່ນປະໝາດ ພາສາລາວ, ວັດທະນະທຳລາວ ແລະ ໃຫ້ເຊີດຊູ ວັດທະນະທຳຝຣັ່ງ, ພວກລ່າເມືອງຂຶ້ນຝຣັ່ງດຳເນີນນະໂຍບາຍຈຳກັດການສຶກສາ ກໍ່ເພື່ອ ແນໃສ່ເຮັດໃຫ້ປະຊາຊົນລາວ ໂງ່ຈ້າຫລ້າຫລັງສ້າງຂໍ້ສະດວກໃຫ້ແກ່ພວກເຂົາໄດ້ປົກຄອງຂູດຮີດ ແລະ ປາບປາມປະຊາຊົນ.

ດ້ານວັດທະນະທຳ ແລະ ສັງຄົມ. ພວກລ່າເມືອງຂຶ້ນຝຣັ່ງ ໄດ້ພະຍາຍາມສ້າງວັດທະນະທຳ ແລະ ສັງຄົມແບບຂ້ອຍຂ້າ ໂດຍແບ່ງແຍກຊົນຊັ້ນ ແລະ ຊົນເຜົ່າໃນລາວ. ເຂົາໄດ້ລ້ຽງເກືອພວກສັກດິນາ, ອາດຍາສິດ, ເຈົ້າຂຸນມຸນນາຍທີ່ບອກໄດ້ໃຊ້ຟັງໄວ້ເປັນເຄື່ອງມືຂອງພວກເຂົາໃນການປົກຄອງປາບປາມ ແລະ ກົດຂີ່ຂູດຮີດຊາວຜູ້ອອກແຮງງານ. ພວກເຂົາໄດ້ນຳເອົາວັດທະນະທຳຕາເວັນຕົກ ເຂົ້າມາເຜີຍແຜ່ ໂດຍໂຄສະນາວ່າ ປະເທດຝຣັ່ງ ເປັນປະເທດສີວິໄລຈະເລີນ ແລະ ຮັ່ງມີ ທັງມີຄວາມເມດຕາຢາກຊ່ວຍສ້າງສາບັນດາອານານິຄົມ. ໃນນັ້ນ, ມີປະເທດລາວ, ໃຫ້ຈະເລີນກ້າວໜ້າເໝືອນກັນ. ເພາະສະນັ້ນ, ຄົນລາວ ຈຶ່ງຕ້ອງຮັບເອົາວັດທະນະທຳຂອງຝຣັ່ງຢ່າງສິ້ນເຊີງບໍ່ວ່າທາງດ້ານວິທະຍາສາດ, ເຕັກນິກ, ວັດທະນະທຳກໍ່ຄືດ້ານຄຸນສົມບັດແບບແຜນວິທີດຳລົງຊີວິດ, ພາສາ, ຮີດຄອງປະເພນີປະຖົມຮອດສັນຊາດລາວ ໄປເຂົ້າສັນຊາດຝຣັ່ງ ແລະ

ອື່ນໆອີກ. ພ້ອມກັນນັ້ນ, ກໍ່ຕ້ອງຖິ້ມປະລະໄລບາງສິ່ງບາງຢ່າງຂອງ ວັດທະນະທຳລາວ ອັນທີ່ຂັດແຍ້ງກັບສິດຜົນປະໂຫຍດຂອງຝຣັ່ງ. ສ່ວນໂຮງຮຽນມັດທະຍົມຕົ້ນມີແຫ່ງດຽວຢູ່ວຽງຈັນ ເທົ່ານັ້ນ ຊື່ວ່າມັດທະຍົມ ປາວີ, ສ້າງຂຶ້ນປີ 1936. ມັດທະຍົມປາຍ ຕ້ອງໄດ້ໄປໄຊ່ງ່ອນ, ພະນົມເປັນ ຫລື ຮ່າໂນ້ຍ. ສ່ວນມະຫາວິທະຍາໄລ ມີແຕ່ ຮ່າໂນ້ຍ ແຫ່ງດຽວ ຮອດປີ 1920. ພວກເຂົາໄດ້ເບີ່ຍເມົາສັກດິນາ, ຊົນຊັ້ນປົກຄອງ ແລະ ປະຊາຊົນລາວ ຫວັງທຳລາຍຮີດຄອງປະເພນີວັດທະນະທຳ ອັນຈົບງາມຂອງລາວ ຄືພວກເຂົາໄດ້ສົ່ງເສີມໃຫ້ມີໂຮງໂສເພນີ, ໂຮງກິນເຫຼົ້າເມົາຢາ, ໂຮງສູບຝິ່ນກິນຊາ, ໂຮງຫຼິ້ນເບ້ຍເຈ້ຍໄພ້ ແລະ ອື່ນໆ ແຕ່ປະຊາຊົນລາວ ສ່ວນໃຫຍ່ບໍ່ຍອມເຂົາເຈົ້າ ຜູ້ມີມູນເຊື້ອຮັກສາຮີດຄອງປະເພນີ, ວັດທະນະທຳອັນຈົບງາມຂອງຕົນ ມາແຕ່ບູຮານນະການ ນັ້ນແມ່ນຍັງສືບຕໍ່ຮັກສາວັດທະນະທຳ ແລະ ສັງຄົມ ອັນຈົບງາມຂອງຊາດໄວ້ໄດ້ຢູ່ຕະຫຼອດມາ.

ດ້ານສາທາລະນະສຸກ ພວກລ່າເມືອງຂຶ້ນຝຣັ່ງ ໄດ້ເອົາໃຈໃສ່ໜ້ອຍທີ່ສຸດ ປີ 1896 ເຂົາ ໄດ້ນຳໃຊ້ງົບປະມານເຂົ້າໃສ່ວຽກງານ ສາທາລະນະສຸກ ພຽງແຕ່ 1% ຂອງງົບປະມານທັງໝົດ ທົ່ວເມືອງລາວ, ມາຮອດ ປີ 1910 ເພີ່ມຂຶ້ນ 1,6%. ສຳລັບໂຮງໝໍ ໃນປີ 1900 ໄດ້ມີ ໂຮງໝໍ ພຽງແຕ່ແຫ່ງດຽວຢູ່ວຽງຈັນ, ມາຮອດປີ 1938 ມີໂຮງໝໍນ້ອຍຢູ່ຫລວງພະບາງ, ຊຽງຂວາງ, ປາກ ຫີນບຸນ, ສະຫວັນນະເຂດ, ປາກເຊ ແລະ ມີສູນເຕົ້າໂຮມຄົນທີ່ເປັນພະຍາດຫລວງ 2 ບ່ອນ ຢູ່ ຫລວງພະບາງ ແລະ ປາກເຊ, ມີສຸກສາລາ 37 ແຫ່ງ, ມີແພດຊັ້ນກາງ, ຊັ້ນຕົ້ນ, ແພດພະດຸງຄັນ ທັງຄົນຝຣັ່ງ ແລະ ຄົນອິນດູຈີນ ທັງໝົດ 200 ຄົນ, ພະນັກງານການຢາອິນດູຈີນ 1 ຄົນ ແລະ ຜູ້ ຊ່ວຍແພດ 2 ຄົນ, ຢຸກຢາປິ່ນປົວກໍ່ຈຳກັດ, ການປິ່ນປົວຕົ້ນຕໍ ແມ່ນແນໃສ່ແຕ່ຄົນຝຣັ່ງ ແລະ ຊົນ ຊັ້ນສັກດິນາເທົ່ານັ້ນ ສ່ວນປະຊາຊົນລາວທົ່ວໄປແລ້ວ ຈະເປັນຕາຍຮ້າຍດີແນວໃດພວກເຂົາກໍ່ບໍ່ ໄດ້ເອົາຫົວໃສ່ໃຈຊາ ຖືວ່າການເຈັບໄຂ້ໄດ້ປ່ວຍຂອງ ປະຊາຊົນລາວ ແມ່ນເປັນ ຂອງທຳມະດາ. ດັ່ງນັ້ນ, ພວກເຂົາຈຶ່ງປ່ອຍໃຫ້ປະຊາຊົນລາວ ປິ່ນປົວພະຍາດເອົາເອງ ຢູ່ກັບ ບ້ານກັບເຮືອນອາ ໃສໝໍຜີ, ໝໍເຍົາ, ນາງທຽມຢ່າງດີທີ່ສຸດກໍ່ປິ່ນປົວດ້ວຍໝໍຢາຮາກໄມ້ພື້ນເມືອງ ທີ່ເຄີຍມີມາແຕ່ບູ ຮານ, ແຕ່ອັນຮ້າຍແຮງ ແມ່ນການປິ່ນປົວດ້ວຍໄສຍະສາດ ທີ່ບໍ່ຖືກກັບຫລັກຄວາມເປັນຈິງເຊັ່ນ: ເຈັບເປັນຫຍັງກໍ່ອ້າງແຕ່ຜີເຮັດ ຕ້ອງບະເຫລີ້ໄຫໄກ່ໂຕ, ໝູ, ງົວ ແລະ ຄວາຍ ເປັນຕົ້ນ, ລະບົບ ການກັນພະຍາດຕ້ານພະຍຸກໍ່ບໍ່ມີ, ປີ 1916 ໄດ້ເກີດພະຍາດອະຫິວາ ລະບາດທົ່ວປະເທດ ພວກ ຝຣັ່ງກໍ່ບໍ່ສາມາດລະງັບພະຍາດນີ້ໄດ້ ເພາະຂາດແພດໝໍ ແລະ ຢຸກຢາປິ່ນປົວ ດ້ວຍເຫດນັ້ນ ຈຶ່ງ ເຮັດໃຫ້ຄົນລາວ ລົ້ມຫາຍຕາຍຈາກເປັນຈຳນວນຫລວງຫລາຍ ສິ່ງທີ່ເປັນໜ້າອິຕົກແມ່ນການ ເຊື່ອຖືງມງວາຍ ມາເຖິງປະຈຸບັນນີ້ ກໍ່ຍັງມີຈຳນວນໜຶ່ງທີ່ຍັງເຊື່ອຖືຢູ່.

III. ຊາວນະຄອນຫຼວງວຽງຈັນ ຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນແບບເກົ່າ ຂອງ ຈັກກະພັດຝຣັ່ງ.

1. ຂະບວນການຕໍ່ສູ້ ໃນໄລຍະບໍ່ທັນມີພັກນຳພາ ແຕ່ປີ 1893 - 1929.

ຫລັງຈາກປະເທດລາວ ກາຍເປັນຫົວເມືອງຂຶ້ນຂອງຝຣັ່ງ ປະຊາຊົນບັນດາເຜົ່າຂອງນະຄອນຫຼວງວຽງຈັນ ກໍ່ຄືທົ່ວປະເທດ ລ້ວນແຕ່ຂາດຄວາມເປັນອິດສະຫລະພາບ ແລະ ຖືກກົດຂີ່ຂົ່ມເຫັງ ຢ່າງໜັກໜ່ວງ ແຕ່ເຖິງຢ່າງໃດກໍ່ຕາມ ປະຊາຊົນ ຊາວນະຄອນຫຼວງວຽງຈັນ ກໍ່ບໍ່ໄດ້ຍອມຈຳນົນເປັນຂ້ອຍຂ້າມ້າໃຊ້ ຂອງຊາວຕ່າງດ້າວຢ່າງງ່າຍດາຍ, ໄດ້ເດັດດ່ຽວຕໍ່ສູ້ຮ່ວມກັບປະຊາຊົນລາວໃນທົ່ວປະເທດ ເພື່ອກອບກູ້ເອົາເອກະລາດ, ອິດສະຫລະພາບມາ ໃຫ້ແກ່ຊາດຂອງຕົນ ເຊັ່ນ: ຂະບວນການຕໍ່ສູ້ພາຍໃຕ້ການນຳພາຂອງພໍ່ກະດວດ ຢູ່ແຂວງ ສະຫວັນນະເຂດ ປີ 1901 - 1903, ຂະບວນການຕໍ່ສູ້ພາຍໃຕ້ການນຳພາຂອງ ອົງແກ້ວ ແລະ ອົງກົມມະດຳ ຢູ່ພາກໃຕ້ລາວ ປີ 1901 - 1907, ຂະບວນການລຸກຮື້ຂຶ້ນຂອງຊາວ ເຜົ່າລື້ ຢູ່ເມືອງ ສິງ ປີ 1908, ຂະບວນການລຸກຮື້ຂຶ້ນຕໍ່ສູ້ ພາຍໃຕ້ການນຳພາຂອງ ເຈົ້າ ວັນນະພູມ ຢູ່ເມືອງ ອູ (ຜົ້ງສາລີ) ປີ 1908 - 1910, ຂະບວນການຕໍ່ສູ້ຂອງປະຊາຊົນ ຊຳເໜືອ ປີ1914 -1915, ຂະບວນການລຸກຮື້ຂຶ້ນຕໍ່ສູ້ ພາຍໃຕ້ການນຳພາຂອງ ອົງແສນ ຢູ່ຜົ້ງສາລີ ປີ 1915 -1917, ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນ ເຜົ່າມົ້ງ ພາຍໃຕ້ການນຳພາຂອງ ເຈົ້າ ຟ້າປັດໄຈ ຢູ່ຊຽງຂວາງ ປີ 1918 - 1922. ສຳລັບຢູ່ **ນະຄອນຫຼວງວຽງຈັນໃນ** ໄລຍະນັ້ນ, ແມ່ນເກີດມີຂະບວນການລຸກຮື້ຂຶ້ນຕໍ່ສູ້ ຂອງປະຊາຊົນ ພາຍໃຕ້ການນຳພາຂອງ ນາຍຄູຄຳ ໃນປີ 1920.

ໃນຂະນະທີ່ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ຕ້ານພວກລ່າເມືອງຂຶ້ນຝຣັ່ງ ພວມລະເບີດຂຶ້ນຢູ່ພາກເໜືອ ແລະ ພາກໃຕ້ຂອງລາວນັ້ນ, ຢູ່ພາກກາງຂອງລາວ ຄືຢູ່ ນະຄອນຫຼວງວຽງຈັນ ອັນເປັນສູນກາງໃຫຍ່ທີ່ສຸດ ຂອງພວກລ່າເມືອງຂຶ້ນຝຣັ່ງປະຈຳລາວ, ເພາະເປັນບ່ອນຕັ້ງສຳນັກງານອົງການ ແລະ ເປັນບ່ອນບັນຊາການໃຫຍ່ຂອງພວກເຂົາ ເຊິ່ງມີກອງຕຳຫລວດ ແລະ ທະຫານສື ປະຈຳຢູ່ຢ່າງໜາແໜ້ນ ແລະ ເຂັ້ມແຂງ, ແຕ່ປະຊາຊົນລາວໃນເຂດ ນະຄອນຫຼວງວຽງຈັນ ອັນປະກອບດ້ວຍນັກຮຽນຮູ້, ຜູ້ຊົງຄຸນວຸດທິ, ພະສົງສຳມະເນນ ກໍ່ບໍ່ໄດ້ຢ້ານກົວອັນໃດໝົດ.

ນາຍຄູຄຳ ເປັນຄົນລາວຜູ້ໜຶ່ງ ທີ່ມີນ້ຳໃຈຮັກຊາດອັນສູງສົ່ງ, ກ້າຫານ ແລະ ຄຽດແຄ້ນສັດຕູຜູ້ຮຸກຮານ ໂດຍສະເພາະ ແມ່ນພວກລ່າເມືອງຂຶ້ນຝຣັ່ງ ທີ່ເຂົ້າມາປົກຄອງລາວ. ໃນເວລາທີ່ເພິ່ນເປັນຄູສອນຢູ່ວັດຈັນ ແລະ ຢູ່ໂຮງຮຽນ ບ້ານ ຫ້ອມ ເພິ່ນໄດ້ເອົາໃຈໃສ່ສຶກສາອົບຮົມປຸກລະດົມຂົນຂວາຍພໍ່ແມ່ປະຊາຊົນ, ພະສົງສຳມະເນນ, ຂ້າລາຊະການ ແລະ ນັກຮຽນໃຫ້ມີນ້ຳໃຈຮັກ

ເຊື້ອແພ່ງຊາດຄຽດແຄ້ນສັດຕູ ເພື່ອພ້ອມກັນຊອກຫາເສັ້ນທາງ ລຸກຂຶ້ນຕໍ່ສູ້ຂັບໄລ່ຝຣັ່ງອອກຈາກ ວຽງຈັນ. ຍ້ອນການປຸກລະດົມຂົມຂວາຍ ແລະ ຜົນສະທ້ອນຈາກການປະຕິບັດນະໂຍບາຍກົດ ຂີ່ຂູດຮີດອັນໜັກໜ່ວງຂອງພວກລ່າເມືອງຂຶ້ນຝຣັ່ງ ທີ່ມີຕໍ່ຊາວນະຄອນຫລວງວຽງຈັນ ນາຍຄູຄຳ ຈຶ່ງສາມາດເຕົ້າໂຮມ ແລະ ໄດ້ຮັບການສະໜັບສະໜູນຈາກປະຊາຊົນ ພະສົງສຳມະເນນ ເປັນ ຈຳນວນຫລວງຫລາຍ. ຈາກນັ້ນ, ເພິ່ນໄດ້ນຳພາປະຊາຊົນຕໍ່ສູ້ຕ້ານຝຣັ່ງ ດ້ວຍຮູບການບໍ່ຍອມ ເສຍພາສີ, ບໍ່ຍອມໄປເປັນກຸລີ, ດັກສະກັດຕີ ແລະ ຂ້າເຈົ້າໜ້າທີ່ຝຣັ່ງ. ເມື່ອເຫດການເພີ່ມທະວີ ຂຶ້ນເລື້ອຍໆ ຢູ່ຫລາຍບ່ອນ ເຮັດໃຫ້ອຳນາດການປົກຄອງຝຣັ່ງບໍ່ພໍໃຈ.

ເພື່ອປາບປາມ ແລະ ດັບມອດຂະບວນການຮັກຊາດ ດັ່ງກ່າວ, ກອງບັນຊາການທະຫານ ຝຣັ່ງຢູ່ວຽງຈັນ ຈຶ່ງໄດ້ນຳກອງທະຫານອອກໄປກວາດລ້າງ ແລະ ເກັບກວາດເອົາຊັບສົມບັດຂອງ ປະຊາຊົນໃນຂົງເຂດນັ້ນຈົນໝົດກ້ຽງ. ເຫດການອັນນີ້ ຍິ່ງເຮັດໃຫ້ປະຊາຊົນຄຽດແຄ້ນຝຣັ່ງຫຼາຍ ຂຶ້ນ, ປະຊາຊົນໄດ້ຮວບຮວມກຳລັງຫລາຍບ່ອນ ເພື່ອກຽມພ້ອມທີ່ຈະແກ້ແຄ້ນຄືນ, ນາຍຄູຄຳ ເຫັນເຫດການເປັນແນວນັ້ນ ຈຶ່ງໄດ້ເຕົ້າໂຮມເອົາກຳລັງ ປະຊາຊົນ ທັງໝົດ ໄປລວມກັນຢູ່ ບ້ານ ຫາດກັນຊາ ເພື່ອກຽມລຸກຮື້ຂຶ້ນຕໍ່ຕ້ານຝຣັ່ງ ຢ່າງເປັນຂະບວນ ໂດຍມີການປະກອບອາວຸດພື້ນ ເມືອງລາວ.

ພໍຮອດກາງ ເດືອນ ພະຈິກ 1920 ຂະບວນການຕໍ່ສູ້ນຳໂດຍ ນາຍຄູຄຳ ໄດ້ຂະຫຍາຍຕົວ ອອກຢ່າງກວ້າງຂວາງ, ໄດ້ມີປະຊາຊົນທົ່ວວຽງຈັນ ແລະ ເຂດອ້ອມແອ້ມໃຫ້ການຮ່ວມມື ແລະ ຫລັ່ງໄຫລໄປສູ່ບ້ານ ຫາດກັນຊາ. ຈາກນັ້ນ ນາຍຄູຄຳ ໄດ້ນຳພາກຳລັງປະຊາຊົນ ແຫ່ຂະບວນ ມຸ້ງໜ້າເຂົ້າສູ່ຕົວເມືອງວຽງຈັນ ເພື່ອຈະດັບສູນພວກຝຣັ່ງໃຫ້ສິ້ນແຄ້ນ. ພວກຝຣັ່ງໄດ້ຈັດຕັ້ງກຳ ລັງເຂົ້າປາບປາມດ້ວຍການຍິງປືນກວດເຂົ້າໃສ່ຝູງຊົນຢ່າງປ່າເຖື່ອນ, ຂະບວນການຂອງປະຊາ ຊົນ ໄດ້ຕໍ່ສູ້ກັບຝຣັ່ງ ຢ່າງເຕັມຄວາມສາມາດ ແຕ່ຍ້ອນກຳລັງ ແລະ ອາວຸດຍັງອ່ອນນ້ອຍບໍ່ທັນ ພຽງພໍ ຈຶ່ງບໍ່ສາມາດຕີເອົາຊະນະຝຣັ່ງໄດ້. ສ່ວນນາຍຄູຄຳ ໄດ້ຖືກບາດເຈັບ ແລະ ຖືກທະຫານ ຝຣັ່ງຈັບຕົວໄດ້ ແລ້ວນຳໄປຂັງຄຸກຢູ່ນະຄອນຫລວງວຽງຈັນ.

ໃນເວລາຝຣັ່ງນຳຕົວ ນາຍຄູຄຳ ໄປປິ່ນປົວບາດແຜຢູ່ໂຮງໝໍມະໂຫສົດ, ເພິ່ນໄດ້ສວຍໂອ ກາດ ໃນຂະນະທີ່ນາຍຄຸມເຜີຕົວ ໂດດໜີລົງໄປທາງ ຫາດດອນຈັນ ລອຍຂ້າມນ້ຳຂອງໄປຂຶ້ນ ຢູ່ທ່າ ບ້ານ ກອງນາງ (ຝັ່ງໄທ) ເພື່ອຫລົບໜີໃຫ້ພົ້ນຈາກການຕິດຕາມຈັບກຸມຂອງຝຣັ່ງ. ຕໍ່ມາ ນາຍຄູຄຳ ຈຶ່ງໄດ້ໄປຢູ່ນຳພີ່ນ້ອງຂອງເພິ່ນທີ່ ບາງກອກ ແລະ ໄດ້ເສຍຊີວິດຢູ່ວັດສີທາຣາມ (ວັດ ຄອກໝູ) ໃນປີ 1949 ດ້ວຍພະຍາດຂອງເພິ່ນເອງ.

ຂະບວນການຕໍ່ສູ້ຂອງຊາວ ນະຄອນຫຼວງວຽງຈັນ ໃນຄັ້ງນີ້ ມັນສະແດງເຖິງຄວາມອົງອາດກ້າຫານເດັດດ່ຽວ ລຸກຮື້ຂຶ້ນຕີສັດຕູຜູ້ຮຸກຮານ. ເຖິງວ່າກຳລັງຂອງສັດຕູຈະເຂັ້ມແຂງປານໃດກໍ່ຕາມ, ແຕ່ຄວາມຮັກຊາດຍົງດແຄ້ນສັດຕູ ຂອງປະຊາຊົນເໜືອກວ່າສິ່ງໃດໝົດ ແລະ ຂະບວນການຕໍ່ສູ້ຈຶ່ງໄດ້ລະເບີດຂຶ້ນ ຢູ່ໃນກະໂຕສູນກາງໃຫຍ່ຂອງສັດຕູເອງ ໂດຍທີ່ພວກເຂົາບໍ່ເຄີຍຄາດຝັນມາກ່ອນ.

ຍ້ອນຄຸນງາມຄວາມດີ ແລະ ມູນເຊື້ອອັນອົງອາດກ້າຫານຂອງ ປະຊາຊົນ ຊາວວຽງຈັນ ຊຶ່ງພາຍໃຕ້ການນຳພາຂອງນາຍຄູຄຳ. ເວລານັ້ນ, ຕົກມາໃນໄລຍະໃໝ່ນີ້ ພັກ ແລະ ລັດຖະບານເຮົາ ຈຶ່ງກຳນົດເອົາ ວັນທີ 7 ຕຸລາ ເປັນວັນຄູ ແຫ່ງຊາດຂອງຊາດລາວເຮົາຈົນເຖິງປະຈຸບັນ.

2. ຂະບວນການຕໍ່ສູ້ ໄລຍະມີພັກ ກອມມູນິດ ອິນດູຈີນ ນຳພາແຕ່ປີ 1930 - 1945.

ມາຮອດຊຸມປີ 1930 ບັນດາປະຊາຊາດ ໃນພາກພື້ນອິນດູຈີນ ທີ່ຖືກແອກຄອບຄອງຂອງພວກຈັກກະພັດຝຣັ່ງ ໜັບເຕ້ງຢູ່ນັ້ນ ກໍ່ມີໂຊກຊະຕາອັນດີ ທີ່ໄດ້ມີແສງສະຫວ່າງແຫ່ງການນຳພາຂອງພັກກອມມູນິດອິນດູຈີນ, ຊຶ່ງສ້າງຕັ້ງຂຶ້ນໂດຍປະທານໂຮ່ຈິມິນ ໃນປີ 1930 ໃນນີ້ປະຊາຊົນລາວບັນດາເຜົ່າເວົ້າລວມ, ເວົ້າສະເພາະ ແມ່ນຊາວນະຄອນຫຼວງວຽງຈັນ ກໍ່ເປັນຜູ້ໂຊກດີຮ່ວມຢູ່ດ້ວຍເພາະ ນະຄອນຫລວງວຽງຈັນ ໄດ້ເປັນໜຶ່ງໃນຈຳນວນ 4 ແຫ່ງທຳອິດ ທີ່ໜ່ວຍພັກກອມມູນິດອິນດູຈີນ ໄດ້ຂະຫຍາຍເຂົ້າມາສ້າງຕັ້ງ ແລະ ເຄື່ອນໄຫວນຳພາຢູ່ລາວ, ຫລັງຈາກນັ້ນ, ທຸກຂະບວນການເຄື່ອນໄຫວຕໍ່ສູ້ຂອງມະຫາຊົນ ໄດ້ຕິດພັນກັບການນຳພາຂອງພັກ. ພັກໄດ້ອອກແຮງກໍ່ສ້າງຮາກຖານການຈັດຕັ້ງຂອງຕົນ ເພື່ອປຸກລະດົມຂົນຂວາຍປະຊາຊົນ ຕ້ານຄືນກັບການຄອບຄອງ ຂອງຈັກກະພັດຝຣັ່ງ. ໜ່ວຍພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນທຳອິດຢູ່ **ຄຸ້ມສາຍລົມ,** ໜ່ວຍພັກນີ້ໄດ້ເຮັດໜ້າທີ່ທັງກໍ່ສ້າງ ແລະ ຂະຫຍາຍການຈັດຕັ້ງປຸກລະດົມຂົນຂວາຍນຳໃຈຮັກຊາດຕ້ານຝຣັ່ງ ຢູ່ໃນໝູ່ກຳມະກອນ, ທະຫານ, ພະນັກງານ, ນັກຮຽນ, ນັກສຶກສາ, ຊາວຄ້າຂາຍນ້ອຍ ແລະ ທັງສະໜັບສະໜູນຂະບວນການຕ້ານຝຣັ່ງ ທີ່ມີຢູ່ແລ້ວດ້ວຍຮູບການໂຮມຊຸມນຸມມິດຕິງ, ນັດຢຸດງານ, ເດີນຂະບວນປະທ້ວງທວງເອົາສິດທຳລົງຊີວິດ ແລະ ສິດອັນຊອບທຳອື່ນໆ ເຊັ່ນ: ຂະບວນກຳມະກອນທ່າເຮືອ ວຽງຈັນ ໄດ້ຕໍ່ສູ້ໃຫ້ເພີ່ມເງິນເດືອນ ໃນເດືອນ ທັນວາ ປີ 1930, ຂະບວນມະຫາຊົນບຸກລຸກເຂົ້າ ໂຮງການຕຳຫລວດ ສັນຕິບານ ທວງໃຫ້ປ່ອຍຕົວຜູ້ນຳຂອງຂະບວນການແຫ່ປະທ້ວງ ຕ້ານລັດທິລ່າເມືອງຂຶ້ນຝຣັ່ງ ທີ່ຖືກຕຳຫລວດຈັບກຸມ ໃນປີ 1931, ຂະບວນແມ່ຄ້າຊາວຂາຍນາຍທຶນນ້ອຍ ພ້ອມກັນຢຸດລົງຕະຫລາດທວງໃຫ້ຫລຸດຜ່ອນພາສີ ແລະ ປະທ້ວງການກະທຳອັນບໍ່ດີ ຂອງເຈົ້າໜ້າທີ່ພາສີອາກອນ ທີ່ມີຕໍ່ເຂົ້າເຈົ້າໃນທ້ອງຕະຫລາດ ປີ 1933, ເດືອນ ພະຈິກ ປີ 1933 ຢູ່ໂຮງຮຽນ ມັດທະຍົມ " ປາວີ " ວຽງຈັນ, ໜ່ວຍພັກຮາກຖານ ແລະ ອົງການຊາວໜຸ່ມ ຄອມມູນິດ ພາຍໃນໂຮງຮຽນ ໄດ້ນຳພານັກ

ຮຽນ 50 ກວ່າຄົນ ເດີນເຂົ້າຫາຜູ້ອຳນວຍການ ເພື່ອປະທ້ວງຕໍ່ການໄລ່ນັກຮຽນອອກຈາກໂຮງ ຮຽນ ແລະ ທວງໃຫ້ໂຮງຮຽນ ຮັບເອົາຜູ້ກ່ຽວເຂົ້າຄືນ ຢ່າງໄດ້ຮັບຜົນ, ປີ 1934 ຢູ່ໂຮງຮຽນການ ຊ່າງປາກປາສັກ ພາຍໃຕ້ການນຳພາຂອງຊາວໜຸ່ມນັກຮຽນ ໄດ້ພ້ອມກັນທວງ ໃຫ້ຝ່າຍປົກຄອງ ເພີ່ມເບ້ຍລ້ຽງແຕ່ 3,5 ກີບຂຶ້ນເປັນ 3,8 ກີບຕໍ່ເດືອນ ແຕ່ບໍ່ໄດ້ຮັບຜົນ ແລະ ເຮັດໃຫ້ນັກຮຽນຈຳ ນວນໜຶ່ງຖືກຈັບ ແລະ ອີກຈຳນວນໜຶ່ງຖືກໄລ່ອອກຈາກໂຮງຮຽນ, ຂະບວນປະທ້ວງຂອງກຳມະ ກອນ ບໍລິສັດ ຕ່ຳຜ້າ ກາບຟາ ໃນປີ 1934 ແລະ ການຫວ່ານໃບປົວເປັນ ພາສາລາວ ແລະ ພາ ສາ ຫວຽດນາມ ໃນວັນສຳຄັນຕ່າງໆ ເຊັ່ນ: ວັນກຳມະກອນສາກົນ, ວັນເກີດຂອງເລນິນ, ວັນມະ ຫາປະຕິວັດສັງຄົມນິຍົມ ເດືອນ ຕຸລາ ລັດເຊຍຂອງສະຫະພາບໂຊວຽດ ແລະ ເງະຕົ໋ງ ຂອງ ຫວຽດນາມ ໄດ້ແຜ່ລາມອອກຢ່າງກວ້າງຂວາງຢູ່ ນະຄອນຫລວງວຽງຈັນ. ມາຮອດກາງປີ 1934 ໂດຍປະຕິບັດຕາມຄຳສັ່ງຂອງຄະນະນຳ ພັກຄອມມູນິດອິນດູຈີນ - ກອງປະຊຸມໃຫຍ່ ສ້າງຕັ້ງຄະ ນະພັກແຄວ້ນລາວ ໄດ້ໄຂຂຶ້ນຢູ່ດອນຊີ້ງຊ້ ນະຄອນຫລວງວຽງຈັນ ນັບແຕ່ວັນທີ 6 ເຖິງວັນທີ 7 ເດືອນ 9 ປີ 1934, ມີຜູ້ແທນເຂົ້າຮ່ວມ 15 ສະຫາຍ ເປັນຕົວແທນໃຫ້ 32 ສະຫາຍ ແບ່ງເປັນ 6 ໜ່ວຍພັກ.

ກອງປະຊຸມໃຫຍ່ໄດ້ມີມະຕິຕົກລົງ ກ່ຽວກັບບັນຫາອັນຮີບດ່ວນ ສະເພາະໜ້າຈຳນວນ ໜຶ່ງຄື:

1. ປັບປຸງ ແລະ ຂະຫຍາຍການຈັດຕັ້ງພັກ ແລະ ບັນດາການຈັດຕັ້ງມະຫາຊົນ.
2. ຊຸກຍູ້ວຽກງານປຸກລະດົມຂົນຂວາຍ ມະຫາຊົນຢູ່ຊົນນະບົດ ໃນບໍລິເວນເຜົ່າຕ່າງໆ.
3. ຊຸກຍູ້ບັນດາຮູບການຕໍ່ສູ້ ທີ່ມີລັກສະນະມະຫາຊົນ ຢ່າງກວ້າງຂວາງ.

ກອງປະຊຸມໄດ້ເລືອກຕັ້ງຄະນະບໍລິຫານງານ ພັກຄອມມູນິດອິນດູຈີນ ປະຈຳແຄວ້ນລາວ ຊຸດທຳອິດ ທີ່ມີຊື່ຫຍໍ້ວ່າ " ຄະນະພັກແຄວ້ນລາວ ".

ກອງປະຊຸມໄດ້ເລືອກເອົາ 4 ສະຫາຍ ເປັນກຳມະການດັ່ງນີ້:

1. ສະຫາຍ ຄຳແສງ ວິໄລ [1].
2. ສະຫາຍ ສະຫວັດ ຜິວຂາວ ຫລື ສຸລິນ ເຊິ່ງເປັນຂ້າລາຊະການໂຍທາ
3. ສະຫາຍ ທິດໝຸຍ ບັນຈົງ
4. ສະຫາຍ ພັນດີ [2]

---

(1) ສະຫາຍ ຄຳແສງ ສີວິໄລ ຕໍ່ມາປີ 1955 ໄດ້ຖືກເລືອກຕັ້ງເປັນກຳມະການສູນກາງພັກປະຊາຊົນລາວ ຊຸດທຳ ອິດ ແລະ ເສຍຊີວິດໃນປີ 1963.

(2) ສະຫາຍ ພັນດີ ເປັນຫົວໜ້າຊາວໜຸ່ມຖືກຈັບຢູ່ປາກເຊ ພາຍຫລັງໄດ້ນຳພາຂະບວນການຈັດຕັ້ງພື້ນຖານ ມີສະມາຊິກຊາວໜຸ່ມ ກອມມູນິດ 25 ຄົນ, ສະມາຊິກ ກຳມະບານ 55 ຄົນ, ສັນນິບາດຕ້ານຈັກກະພັດນິຍົມ 69 ຄົນ, ສະມາຊິກສະມາຄົມແມ່ຍິງ 5 ຄົນ, ສະມາຊິກຊາວໜຸ່ມນັກຮຽນ 20 ຄົນ ແລະ ສະມາຊິກສະມາຄົມກີລາ 18 ຄົນ.

ພາຍຫລັງທີ່ພັກກອມມູນິດອິນດູຈີນ ໄດ້ສ້າງຕັ້ງຄະນະພັກແຄ້ວລາວ (ຄະນະພັກກອມມູນິດອິນດູຈີນ ປະຈຳແຄ້ວລາວ) ຂຶ້ນໃນວັນທີ 7 ເດືອນ 9 ປີ 1934 ແລ້ວພັກໄດ້ມີໂຄງການປຸກລະດົມຂົນຂວາຍມະຫາຊົນຢ່າງກວ້າງຂວາງ ອັນໄດ້ເຮັດໃຫ້ຂະບວນການຕໍ່ສູ້ຕ້ານຝຣັ່ງເປັນຂະບວນກວ້າງຂວາງ ເປັນຕົ້ນ ໃນເດືອນ ມັງກອນ ປີ 1935 ໄດ້ມີການເດີນຂະບວນຂະໜາດໃຫຍ່ຂອງຊາວໜຸ່ມ ວຽງຈັນ ຮ່ວມກັບຊາວໜຸ່ມ ຫວຽດນາມ ຄັດຄ້ານຕໍ່ຝຣັ່ງ ທີ່ຈັບກຸມຊາວໜຸ່ມຜູ້ໜຶ່ງຢ່າງບໍ່ມີເຫດຜົນ, ປະນາມການປາບປາມຢ່າງປ່າເຖື່ອນຂອງພວກກຳອຳນາດ, ທວງໃຫ້ລົງໂທດພວກນາຍຕຳຫລວດ ຜູ້ໂຫດຫ້ຽມ ທີ່ຂອກເລື່ອງປາບປາມປະຊາຊົນ.

ມາຮອດເດືອນ ມີນາ ປີ 1937 ໄດ້ມີຂະບວນການນັດຢຸດງານ 4 ມື້ ຕໍ່ເນື່ອງຂອງກຳມະກອນໄຟຟ້າວຽງຈັນໃຫ້ເພີ່ມເງິນເດືອນ 10%, ທວງໃຫ້ຈ່າຍເງິນເດືອນໃຫ້ກຳມະກອນທີ່ເຈັບໄຂ້ໄດ້ປ່ວຍ, ໃຫ້ຄອບຄົວກຳມະກອນ ໄດ້ໃຊ້ໄຟຟ້າໂດຍບໍ່ໄດ້ເສຍຄ່າ ດ້ວຍການຕໍ່ສູ້ຢ່າງເດັດດ່ຽວຂອງກຳມະກອນ ພວກຝຣັ່ງຈຳຕ້ອງຍອມແກ້ໄຂຕາມຄຳປະທ້ວງຂອງເຂົາເຈົ້າ. ຂະບວນການຕໍ່ສູ້ຕ່າງໆ ດັ່ງກ່າວນັ້ນ, ແມ່ນຮູບການໜຶ່ງທີ່ສະແດງໃຫ້ເຫັນຄວາມພະຍາຍາມ ຕໍ່ສູ້ກັບພວກຝຣັ່ງ ທີ່ຢຶດຄອງຕາມເງື່ອນໄຂ ແລະ ຄວາມສະມາດ ຂອງແຕ່ລະພາກສ່ວນ ທີ່ຈະເຮັດໄດ້ໃນໄລຍະນັ້ນ.



ບັນດາຈຸດທີ່ ພັກຄອມມູນິດອິນດູຈີນໄດ້ເຂົ້າມາເຄື່ອນໄຫວ ຢູ່ລາວຄັ້ງທຳອິດ ໃນຊຸມປີ 1930 -1945

ມາຮອດ ວັນທີ 1 ກັນຍາ ປີ 1939, ສະພາບຂອງໂລກເວລານັ້ນ ກອງທະຫານຟາດຊິດ ເຢຍລະມັນ ໄດ້ບຸກຕີເຂົ້າປະເທດ ໂປໂລຍ ອັນເປັນການຈູດຂະບວນສົງຄາມໂລກ ຄັ້ງທີ II ໃນ ເວລາດຽວກັນນັ້ນ ກອງທະຫານຟາດຊິດຍີ່ປຸ່ນກໍ່ໄດ້ບຸກຕີ ແລະ ຢຶດຄອງເອົາກວາງຕຸງ, ກວາງຊີ, ເກາະໄຮຫລຳຂອງປະເທດຈີນ ແລະ ໄດ້ຂະຫຍາຍອິດທິພົນແຜ່ອຳນາດເຂົ້າມາອິນດູຈີນ (ລາວ - ຫວຽດນາມ ແລະ ກຳປູເຈຍ) ດ້ວຍຈຸດປະສົງຮຸກຮານເອົາອິນດູຈີນ ເປັນຫົວເມືອງຂຶ້ນ; ມາ ຮອດກາງຄືນ ວັນທີ 9 ມີນາ ປີ 1945 ກອງທັບຟາຊິດຍີ່ປຸ່ນ ໄດ້ບຸກຕີບຸງດຢຶດເອົາປະເທດຫວຽດ ນາມ ແລະ ກຳປູເຈຍ, ທະຫານຍີ່ປຸ່ນ ສ່ວນໜຶ່ງທີ່ຢູ່ປະເທດໄທ ໄດ້ຂ້າມແມ່ນ້ຳຂອງທ່າເມືອງ ໜອງຄາຍ ເຖິງຕອນເຊົ້າ ວັນທີ 10 ມີນາ ປີ 1945 ກໍ່ເຂົ້າບຸກຕີຢຶດເອົາ ນະຄອນຫລວງວຽງຈັນ. ແຕ່ນັ້ນມາ ຊາວນະຄອນຫຼວງວຽງຈັນ ລວມທັງປະຊາຊົນລາວບັນດາເຜົ່າ, ຈຳຕ້ອງໄດ້ດຳລົງຊີ ວິດແບບຂ້າທາດ, ທົນທຸກທໍລະມານ ເພາະແອກຄອບຄອງອັນເກົ່າ ຂອງພວກລ່າເມືອງຂຶ້ນຝຣັ່ງ ແລ້ວຊ້ຳພັດຍັງມີແອກອັນໃໝ່ຂອງພວກຂຸນເສິກຍີ່ປຸ່ນມາເພີ່ມເຕີມໃສ່ອີກ. ເວລານັ້ນ, ຊາວນະ ຄອນຫຼວງວຽງຈັນ ກໍ່ຄືປະຊາຊົນລາວຕ້ອງໄດ້ຕໍ່ສູ້ກັບສັດຕູຜູ້ຮຸກຮານ 2 ໂຕຄື: ຈັກກະພັດຝຣັ່ງ ແລະ ຟາດຊິດຍີ່ປຸ່ນ.

ຕໍ່ໜ້າສະພາບການບ້ານເມືອງທີ່ຄັບຂັນຄືດັ່ງກ່າວ ໂດຍພາຍໃຕ້ຄຳຂວັນ " ຕີຕ້ານຝຣັ່ງ, ຂັບໄລ່ ຍີ່ປຸ່ນ ຍາດເອົາເອກະລາດ " ຄະນະພັກນະຄອນຫຼວງວຽງຈັນ ທີ່ຂຶ້ນກັບຄະນະພັກແຄ້ວ້ນ ລາວ ກໍ່ໄດ້ເອົາໃຈໃສ່ຕັ້ງໜ້າສືບຕໍ່ກໍ່ສ້າງ ແລະ ຂະຫຍາຍຮາກຖານພັກ, ກໍ່ສ້າງ ແລະ ຂະຫຍາຍ ຮາກຖານການເມືອງໃນໝູ່ປະຊາຊົນທັງຕົວເມືອງ ແລະ ຊົນນະບົດອ້ອມຂ້າງທັງກະກຽມ ແລະ ຈັດວາງກຳລັງ ເພື່ອລຸກຮື້ຂຶ້ນຢຶດອຳນາດໃນເມື່ອມີກາລະໂອກາດອັນເໝາະສົມໃຫ້ທວງທັນກັບ ການຊີ້ນຳຂອງຄະນະພັກແຄ້ວ້ນລາວ.

ມາເຖິງເດືອນ ສິງຫາ ປີ 1945, ສົງຄາມໂລກ ຄັ້ງທີ II ກ້າວເຂົ້າສູ່ໄລຍະສຸດທ້າຍ ຫລັງ ຈາກສະຫະພາບໂຊວຽດ ພ່າຍແພ້ ຟາດຊິດເຢຍລະມັນ ແລະ ອີຕາລີແລ້ວ. ມາຮອດວັນທີ 8 ສິງ ຫາ ປີ 1945 ສະຫະພາບໂຊວຽດ ໄດ້ປະກາດສົງຄາມກັບ ຟາດຊິດຍີ່ປຸ່ນ ພຽງແຕ່ອາທິດດຽວ, ມາເຖິງວັນທີ 15 ສິງຫາ ປີ 1945 ກອງທະຫານຊັ້ນຢັ່ງມຂອງ ຂຸນເສິກ ຍີ່ປຸ່ນ ກໍ່ຍອມຈຳນົນຕໍ່ ກອງທັບສະຫະພາບໂຊວຽດ ແລະ ພັນທະມິດຢ່າງບໍ່ມີເງື່ອນໄຂ.

ເວລານັ້ນ, ສະພາບວິກິດການທາງ ດ້ານການເມືອງ ຢູ່ ອິນດູຈີນ ນັບມື້ນັບຮ້າຍແຮງ ໂດຍ ສະເພາະພາຍຫລັງ ຟາດຊິດເຢຍລະມັນ ຍອມຈຳນົນ, ຢູ່ໃນກອງທະຫານ ຍີ່ປຸ່ນ ໄດ້ເກີດມີ ຄວາມວຸ້ນວາຍເສຍກຳລັງໃຈ ເມື່ອໄດ້ຮັບຄຳສັ່ງຈາກກອງບັນຊາການ ໃຫ້ຢຸດເຊົາ ການເຄື່ອນ ໄຫວ ແລະ ຍອມຈຳນົນ ນາຍທະຫານຫລາຍຄົນ ໄດ້ຂ້າໂຕຕາຍ ຍ້ອນບໍ່ມີທາງອອກ ອຳນາດ

ການປົກຄອງຫຸ່ນໄມ້ມືຂອງ ຍີ່ປຸ່ນ ໃນອິນດູຈີນ ຖືກຕົກຢູ່ໃນຄວາມຍ້ານກົວຫວັ່ນໄຫວກະວົນກະວາຍຂາດບ່ອນອີງ ເພາະນາຍເໜືອຫົວ ຂອງພວກເຂົາຍອມຈຳນົນ ໃນເມື່ອສະພາບການພາວະວິໄສໄດ້ສຸກງອມ ແລະ ເອື້ອອຳນວຍໃຫ້ແກ່ການລຸກຮື້ຂຶ້ນແນວນັ້ນ ຂະບວນການປະຕິວັດໃນລາວ ໄດ້ລຸກຮື້ຂຶ້ນຢ່າງຟົດເດືອດ ແລະ ທັນການຕາມຕົວເມືອງໃຫຍ່ຕ່າງໆ ປະຊາຊົນລາວ ກໍ່ຄືຊາວ ນະຄອນຫລວງວຽງຈັນ ລຸກຮື້ຂຶ້ນຕໍ່ສູ້ ບໍ່ພຽງແຕ່ເພື່ອຢຶດອຳນາດຈາກ ຍີ່ປຸ່ນ ເທົ່ານັ້ນ, ແຕ່ຫາກຍັງຕ້ອງດຳເນີນການຕໍ່ສູ້ ຕ້ານພວກລ່າເມືອງຂຶ້ນຝຣັ່ງ ທີ່ມີອັງກິດໜູນຫລັງ ເຊິ່ງພວມເຄື່ອນໄຫວ ເພື່ອກັບຄືນມາຮຸກຮານລາວເຮົາອີກດ້ວຍ ເພາະເວລານັ້ນ, ພວກລ່າເມືອງຂຶ້ນຝຣັ່ງ ພ້ອມດ້ວຍລູກມື ພວມພະຍາຍາມປະຕິບັດການຕໍ່ສູ້ ຟື້ນຟູສິດ ປົກຄອງຂອງເຂົາ ຢູ່ຕາມຕົວເມືອງຕ່າງໆ ໃນລາວ ລວມທັງນະຄອນຫລວງວຽງຈັນ.



ຂະບວນການຂອງ ປະຊາຊົນວຽງຈັນ ລຸກຮື້ຂຶ້ນຢຶດອຳນາດຈາກຝຣັ່ງ ວັນທີ 23 ສິງຫາ 1945

ດ້ວຍຄວາມເຊື່ອໝັ້ນ ຕໍ່ກຳລັງແຮງປະຕິວັດ ຂອງຂະບວນການມະຫາຊົນ, ຄະນະພັກແຄ້ວນລາວ ໄດ້ເດັດດ່ຽວນຳພາ ປຸກລະດົມປະຊາຊົນ ລຸກຮື້ຂຶ້ນຢຶດອຳນາດການປົກຄອງ ຈາກກຳມືຂອງພວກຂຸນເສິກຍີ່ປຸ່ນ ແລະ ກະກຽມຕ້ານການກັບຄືນມາຮຸກຮານລາວ ອີກຄັ້ງໃໝ່ຂອງພວກລ່າເມືອງຂຶ້ນຝຣັ່ງ ຂະບວນລຸກຮື້ຂຶ້ນຂອງປະຊາຊົນ ໄດ້ລະເບີດຂຶ້ນຢູ່ນະຄອນຫລວງວຽງຈັນ ເປັນບ່ອນທຳອິດ ເຊັ່ນ: ໂຮງງານຕຳແຜ່ນກາບຟາ 500 ຄົນ ທວງໃຫ້ ຍີ່ປຸ່ນ ຈ່າຍເງິນເດືອນ ແລະ ມອບໂຮງງານໃຫ້ຄົນລາວ ກ່ອນທີ່ພວກເຂົາຈະຖອນໜີ. ຄະນະພັກແຄ້ວນລາວ ໄດ້ປຸກ

ລະດົມມະຫາຊົນທາງນອກເຂົ້າໄປຊ່ວຍໜູນ, ທະຫານຍີ່ປຸ່ນ ຍິງປືນໃຫຍ່ໃສ່ ເຮັດໃຫ້ປະຊາຊົນ ຈຳນວນໜຶ່ງໄດ້ຮັບບາດເຈັບ ແລະ ຈັບຕົວແທນຂອງກຳມະກອນໄປກັກຂັງ, ການກະທຳດັ່ງກ່າວ ເທົ່າກັບການເອົານ້ຳມັນຖອກໃສ່ໄຟ, ອັນໄດ້ເຮັດໃຫ້ຂະບວນການຕໍ່ສູ້ຂອງມະຫາຊົນໃນວຽງຈັນ ຍິງລະເບີດຂຶ້ນຊັກໃຊ້ ຈົນບັງຄັບໃຫ້ ຍີ່ປຸ່ນ ຕ້ອງຍອມປ່ອຍຕົວແທນກຳມະກອນ ທີ່ຖືກຈັບ ແລະ ມອບໂຮງງານໃຫ້ຄົນລາວ. ວັນທີ 5 ກັນຍາ ປີ 1945 ຂະບວນປະຊາຊົນ ນະຄອນຫລວງ ວຽງ ຈັນ ເຂົ້າປິດລ້ອມຄັດຄ້ານ ທະຫານຝຣັ່ງ ຢ່າງແຂງແຮງ ແລະ ບັງຄັບໃຫ້ພວກເຂົາຈຳຕ້ອງຖອນ ກຳລັງອອກຈາກ ນະຄອນຫຼວງວຽງຈັນ ໄປຫາທີ່ຕັ້ງທັບຂອງພວກເຂົາທີ່ໜອງຄາຍ ແລະ ອີກຈຳ ນວນໜຶ່ງໄດ້ແຕກໜີເຂົ້າປ່າ. ການລຸກຮື້ຂຶ້ນຂອງຊາວນະຄອນຫລວງວຽງຈັນ ໄດ້ນຳຜົນສະທ້ອນ ອັນໃຫຍ່ຫລວງເຮັດໃຫ້ພວກທະຫານ, ຕຳຫລວດ, ຂ້າຣາຊະການໃນກຸ່ມກຳອຳນາດການປົກຄອງ ເກີດມີແນວຄິດເອ່ນອ່ຽງ ມາຫາກຳລັງລຸກຮື້ຂຶ້ນຂອງມະຫາຊົນ ນັບມື້ນັບຫລາຍຂຶ້ນ.

ຍ້ອນມີການຊີ້ນຳຂອງຄະນະພັກນະຄອນຫລວງວຽງຈັນ ບວກໃສ່ກັບນ້ຳໃຈຮຸງດແຄ້ນຕໍ່ ພວກຈັກກະພັດຝຣັ່ງ ແລະ ຟາດຊິດຍີ່ປຸ່ນ, ປະຊາຊົນຊາວນະຄອນຫລວງວຽງຈັນ ຈຳນວນໝື່ນ ກວ່າຄົນ ໄດ້ພ້ອມກັນຈັບເອົາການລະໂອກາດ, ໃນຂະນະທີ່ຍີ່ປຸ່ນ ປະລາໄຊໃຫ້ພັນທະມິດນັ້ນລຸກ ຮື້ຂຶ້ນຢຶດອຳນາດຂັບໄລ່ຍີ່ປຸ່ນ ດ້ວຍຄວາມອົງອາດກ້າຫານ ໃນວັນທີ 23 ສິງຫາ ປີ 1945. ຫລັງ ຈາກນັ້ນພຽງແຕ່ 3 ວັນ ຄືນວັນທີ 26 ສິງຫາ ກອງປະກອບອາວຸດຢູ່ ບ້ານ ເກີນ, ນາຍາງ, ອີ່ໄລ ແລະ ທ່າງ່ອນ ໄດ້ຂັບໄລ່ພວກຝຣັ່ງ ແລະ ໄດ້ນັດກັນໂຮມຊຸມນຸມໃຫຍ່ ທີ່ມີຈຳນວນພົນເຂົ້າ ຮ່ວມ 2 ໝື່ນກວ່າຄົນ ຢູ່ສະໜາມກິລາແຫ່ງຊາດ **ປະກາດເອກະລາດຂອງລາວຕໍ່ໂລກ ແລະ ສ້າງຕັ້ງລັດຖະບານລາວ ອິດສະຫລະຂຶ້ນ ເປັນ ເທື່ອທຳອິດ ໃນວັນທີ 12 ເດືອນ ຕຸລາ ປີ 1945. ເຫດການອັນຍິ່ງໃຫຍ່ ດັ່ງກ່າວນັ້ນໄດ້ເປັນການ ເປີດໜ້າປະຫວັດສາດໃໝ່ ໃຫ້ແກ່ຊາວນະຄອນ ຫລວງວຽງຈັນ ກໍ່ຄືປະຊາຊົນລາວກ້າວເຂົ້າສູ່ ໄລຍະໃໝ່ຂອງການປະຕິວັດລາວ.**

IV. ການຕໍ່ສູ້ ຕ້ານການຄືນມາຮຸກຮານລາວ ອີກຄັ້ງໃໝ່ ຂອງຈັກກະພັດຝຣັ່ງ ແຕ່ປີ 1946 - 1954.

1. ສະພາບການກັບຄືນມາຮຸກຮານລາວອີກຄັ້ງໃໝ່ ຂອງຈັກກະພັດຝຣັ່ງ.

ພາຍຫລັງພວກຟາດຊິດຍີ່ປຸ່ນ ໄດ້ຖືກປະລາໄຊໃຫ້ສຳພັນທະມິດ ແລະ ໄດ້ຖອນກຳລັງ ຈາກລາວກັບຄືນເມືອປະເທດ ແລ້ວພວກຈັກກະພັດຝຣັ່ງ ໂດຍໄດ້ຮັບການສະໜັບສະໜູນຈາກ ກອງທະຫານອັງກິດ ແລະ ລັດຖະບານ ຈຽງໄຄເຊັກ ໄດ້ກັບຄືນມາຢຶດຄອງລາວອີກຄັ້ງໃໝ່ດ້ວຍ ການນຳໃຊ້ກຳລັງບຸກຕີເຂົ້າ 3 ທິດ ໃນເວລາດຽວກັນ ຄື: ມາຈາກຈີນ, ມາຈາກພາກກາງຫວຽດ ນາມ ແລະ ກຳປູເຈຍ ເວລານັ້ນ ລັດຖະບານລາວອິດສະຫລະ ກໍ່ໄດ້ປຸກລະດົມ ປະຊາຊົນລາວ

ບັນດາເຜົ່າ ເຂົ້າຮ່ວມເປັນກຳລັງປະກອບອາວຸດກຽມຕ້ານຄືນຢ່າງແຂງແຮງ ເພື່ອປ້ອງກັນບັນດາຕົວເມືອງຕ່າງໆ ແຕ່ຍ້ອນວ່າ: ສັດຕູມີກຳລັງພົນ ແລະ ພາຫະນະສູ້ຮົບຫລາຍ ແລະ ທັງທັນສະໄໝກວ່າ ໃນເດືອນ ມີນາ ປີ 1946 ພວກເຂົາໄດ້ບຸກໂຈມຕີຢຶດເອົາປາກເຊ, ສາລະວັນ, ອັດຕະປື ແລະ ຈຳປາສັກ, ວັນທີ 15 ມີນາ ປີ 1946 ບຸກໂຈມຕີຢຶດເອົາສະຫວັນນະເຂດ, ວັນທີ 21 ມີນາ ປີ 1946 ບຸກໂຈມຕີຢຶດເອົາຕົວ ເມືອງ ທ່າແຂກ ເຊິ່ງມີທີ່ຕັ້ງຍຸດທະສາດທີ່ສຳຄັນເປັນບ່ອນຕິດຈອດລະຫວ່າງພາກເໜືອກັບພາກໃຕ້ ເປັນບ່ອນກຳລັງປະກອບອາວຸດລາວແໜ້ນໜາ ໂດຍມີທ່ານ ປະທານ ສຸພານຸວົງ ເປັນຜູ້ບັງຄັບບັນຊາ. ເມື່ອຝຣັ່ງຢຶດໄດ້ສະຫວັນນະເຂດ ແລະ ທ່າແຂກ ແຂວງ ຄຳມ່ວນ ແລ້ວຢູ່ທາງວຽງຈັນລັດຖະບານລາວອິດສະຫລະ ໄດ້ກຽມການຕໍ່ສູ້ປ້ອງກັນ ນະຄອນຫຼວງວຽງຈັນໄວ້. ໃນວັນທີ 30 ມີນາ ກຳລັງຂອງຝຣັ່ງໄດ້ເຂົ້າປິດລ້ອມວຽງຈັນ ທັງ 3 ທິດ, ພ້ອມກັນ: ກອງໜຶ່ງເຂົ້າມາທາງທິດໃຕ້ຕັດສາຍທາງທ່າເດື່ອ, ກອງໜຶ່ງເຂົ້າມາທາງທິດຕາເວັນອອກ ຕາມສາຍທາງທ່າງ່ອນ ແລະ ອີກກອງໜຶ່ງ ເຂົ້າທາງດ້ານເໜືອ ຕັດໃສ່ຖະໜົນ ຫລວງພະບາງ ຫວັງດັບສູນລັດຖະບານລາວອິດສະຫລະ ແລະ ບັນດາກຳລັງປະຕິວັດຢູ່ ນະຄອນຫຼວງວຽງຈັນ, ໃນເວລາທີ່ພວມຕົກຢູ່ໃນວົງປິດລ້ອມນັ້ນ ຄະນະລັດຖະບານລາວອິດສະຫລະ ຈຳນວນໜຶ່ງໄດ້ຕົກລົງຍົກຍ້າຍອອກຈາກວຽງຈັນ ຂຶ້ນໄປສູ່ເຂດທີ່ໝັ້ນຂອງການປະຕິວັດ ຕາມແຜນການວາງໄວ້. ວັນທີ 2 - 21 ເມສາ ປີ 1946 ກຳລັງຂອງຝຣັ່ງທີ່ຫລາຍກວ່າ ແລະ ມີອາວຸດທີ່ທັນສະໄໝກວ່ານັ້ນ ໄດ້ບຸກໂຈມຕີເຂົ້າ ນະຄອນຫລວງວຽງຈັນ ທັງ 3 ທິດ ພ້ອມໆກັນ. ໃນເວລານັ້ນຄະນະພັກ ນະຄອນຫລວງວຽງຈັນ ໄດ້ນຳພາກຳລັງປະກອບອາວຸດ ແລະ ປະຊາຊົນ ເດ ເດ່ງ ຕ ສູ້ຮົບປ້ອງກັນຢ່າງພິລະອາດຫານ ຈົນເຖິງເວລາ 4 ໂມງເຊົ້າ ຂອງວັນທີ 24 ເມສາ ສັດຕູຈຶ່ງສາມາດບຸກຕີເຂົ້າໃຈກາງ ເມືອງວຽງຈັນ ໄດ້. ກຳລັງຂອງພວກເຮົາສ່ວນໜຶ່ງ ໄດ້ຕີຜ່າວົງປິດລ້ອມ ອອກທາງດ້ານໜືອ ຂຶ້ນໄປຕາມສາຍທາງ ຫລວງພະບາງ ເພື່ອສືບຕໍ່ຈັດຕັ້ງສະກັດກັ້ນປົກປ້ອງ ປ້ອມໜັ້ນ ຫລວງພະບາງ ແລະ ອີກສ່ວນໜຶ່ງໄດ້ຂ້າມໄປຝັ່ງ ປະເທດໄທ ເພື່ອຕັ້ງຕົວ ແລະ ຈັດວາງກຳລັງກູ້ຊາດຄືນໃໝ່.

ວັນທີ 24 ພຶດສະພາ ປີ 1946 ກອງທະຫານຝຣັ່ງ ໄດ້ບຸກຕີຢຶດເອົາຕົວເມືອງ ຫລວງພະບາງ. ນັບແຕ່ນັ້ນມາປ້ອມໜັ້ນສຳຄັນ ຂອງຄະນະລັດຖະບານລາວອິດສະຫລະ ໄດ້ຖືກພວກລ່າເມືອງຂຶ້ນຝຣັ່ງ ບຸກຕີຢຶດເອົາ. ພວກເຂົາໄດ້ເຂັ່ນຂ້າປະຊາຊົນລາວ ຜູ້ຮັກຊາດຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ. ຕໍ່ໜ້າພາລະກິດ ຕໍ່ສູ້ອັນຖືກຕ້ອງເປັນທຳ ຂອງປະຊາຊົນລາວ. ຄະນະລັດຖະບານລາວອິດສະຫລະໄດ້ຮັບການສ້າງຕັ້ງຂຶ້ນອີກ ແລະ ໄດ້ສືບຕໍ່ເຄື່ອນໄຫວຢູ່ປະເທດໄທ ແລະ ພາກສ່ວນກຳລັງຮັກຊາດທີ່ຂຶ້ນໄປສູ່ເຂດທີ່ໝັ້ນຂອງການປະຕິວັດນັ້ນ ກໍ່ໄດ້ເດັດດ່ຽວສືບຕໍ່ເຄື່ອນໄຫວຕີຕ້ານພວກລ່າເມືອງຂຶ້ນຝຣັ່ງ ຢ່າງເປັນຂະບວນກວ້າງຂວາງ ແລະ ຕັ້ງໜ້າກວ່າເກົ່າ.



ສະຖານທີ່ ປະກາດເອກະລາດຂອງລັດຖະບານລາວ ອິດສະຫລະ ທີ່ວຽງຈັນ 12/10/1945



ທະຫານຂອງພວກລ່າເມືອງຂຶ້ນຝຣັ່ງ ເຄື່ອນທັບ ເຂົ້າລາວ ປີ 1946 .

2. ຈັກກະພັດຝຣັ່ງ ຟື້ນຟູແອກລ່າເມືອງຂຶ້ນຢູ່ລາວ.

ພາຍຫຼັງຢຶດເອົາຕົວເມືອງທີ່ສຳຄັນ ຢູ່ທົ່ວປະເທດລາວໄດ້ຄົບໝົດແລ້ວ ພວກລ່າເມືອງຂຶ້ນຝຣັ່ງ ກໍ່ຂຸ່ນຂ້ຽວດຳເນີນແຜນການ ຟື້ນຟູແອກປົກຄອງລ່າເມືອງຂຶ້ນຂອງເຂົາ ໂດຍສວຍໃຊ້ເຈົ້າຊີວິດ ແລະ ພວກສັກດິນາປະຕິການ ເພື່ອຟື້ນຟູລະບົບການຈັດຕັ້ງປົກຄອງ ຂອງພວກເຂົາ ແບບ "ເຊື່ອງຊ້ອນ" ໝາຍຄວາມວ່າຄົນຝຣັ່ງ ຈະບໍ່ມາເປັນຜູ້ສຳເລັດຣາຊະການເຈົ້າແຂວງ, ເຈົ້າເມືອງຄືແຕ່ກ່ອນ. ແຕ່ເທື່ອນີ້ພວກເຂົາຈະມາເປັນ "ທີ່ປຶກສາ" ໃຫ້ແກ່ເຈົ້າຊີວິດ, ເຈົ້າແຂວງ, ເຈົ້າເມືອງແຕ່ລະກະຊວງ ແລະ ແຕ່ລະສຳນັກງານບໍ່ວ່າທາງພົນລະເຮືອນກໍ່ຄືທາງຝ່າຍທະຫານ, ຕຳຫລວດ ແລະ ອື່ນໆ ທີ່ແມ່ນຄົນລາວ. ນັ້ນແມ່ນການສ້າງຕັ້ງກົງຈັກການປົກຄອງ " ຫຸ່ນ " ເທື່ອທຳອິດຂຶ້ນຢູ່ປະເທດລາວ ຂ້າຣາຊະການຄົນລາວ ຕ້ອງປະຕິບັດຕາມຄຳສັ່ງ ຂອງລະບົບທີ່ປຶກສາຂອງຝຣັ່ງ ທີ່ມາບັນຊາຢູ່ເບື້ອງຫລັງຄຽງຂ້າງກັບຄົນລາວ. ໄປພ້ອມໆກັບການຟື້ນຟູລະບົບການຈັດຕັ້ງປົກຄອງ, ພວກຝຣັ່ງກໍ່ໄດ້ຂຸ້ນຂ້ຽວເກັບເກນທະຫານ, ສ້າງຕັ້ງລະບົບປ້ອມຄ້າຍຕ່າງໆ ຂະຫຍາຍການຈັດຕັ້ງທະຫານປາກຕີຊັ້ງ ແລະ ກອງປາບຢູ່ທ້ອງຖິ່ນ ເພື່ອຄວບຄຸມກວດກາ ແລະ ປາບປາມປະຊາຊົນ ທັ້ງຕ້ານການເຄື່ອນໄຫວ ຂອງກຳລັງປະຕິວັດ, ພ້ອມກັນນັ້ນ, ພວກເຂົາກໍ່ປະຕິບັດນະໂຍບາຍຫລອກລວງທາງການເມືອງ ເຊັ່ນ: ວັນທີ 28 ເດືອນ ກໍລະກົດ ປີ 1946 ມີການເຊັນສັນຍາຮັບຮູ້ລາວເປັນເອກະລາດ, ເອກະພາບ ແລະ ປົກ ຄອງຕົນເອງຢູ່ໃນເຄືອສະຫະພັນຝຣັ່ງເສດ ແລະ ເລືອກຕັ້ງສະພາຜູ້ແທນລາດສະດອນ ຂຶ້ນໃນເດືອນ ພຶດສະພາ ປີ 1947; ປະກາດໃຊ້ລັດຖະທຳມະນູນ, ອະນຸຍາດໃຫ້ຈັດຕັ້ງພັກ ການເມືອງຕ່າງໆຂຶ້ນ ເພື່ອໃຊ້ເປັນເຄື່ອງມືແບ່ງແຍກພາຍໃນລາວ, ທຳລາຍຂະບວນການຕໍ່ຕ້ານພ້ອມນັ້ນ ພວກເຂົາກໍ່ທຳການກອບໂກຍ ແລະ ຂູດຮີດປະຊາຊົນດ້ວຍວິທີແນບນຽນ ແລະ ໜັກໜ່ວງກວ່າເກົ່າ. ປະຕິບັດນະໂຍບາຍເອົາສົງຄາມລ້ຽງສົງຄາມ " ເອົາຄົນລາວຢູ່ກັບທີ່ ຂ້າຟັນກັນເອງ ". ແຕ່ເຖິງແມ່ນວ່າພວກຝຣັ່ງ ຈະຂູດຮີດ ແລະ ທຳການປາບປາມຢ່າງໂຫດຮ້າຍປານໃດກໍ່ຕາມ ຂະບວນການຕໍ່ສູ້ຕ້ານຝຣັ່ງ ຂອງປະຊາຊົນລາວ ກໍ່ຍັງສືບຕໍ່ເປັນຂະບວນຢ່າງຕໍ່ເນື່ອງ, ສະເພາະຢູ່ນະຄອນຫລວງວຽງຈັນ ເວລານັ້ນ ຄະນະພັກ ນະຄອນຫຼວງວຽງຈັນ ໄດ້ເຮັດໜ້າທີ່ປະສານສົມທົບກັບ ຄະນະລັດຖະບານລາວອິດສະຫລະ ຢູ່ເຂດທີ່ໝັ້ນຂອງການປະຕິວັດ ແລະ ຢູ່ປະເທດໄທ ຊຸ້ນຳກໍ່ສ້າງຮາກຖານການເມືອງ ແລະ ກຳລັງປະກອບອາວຸດຢູ່ ນະຄອນຫຼວງວຽງຈັນ ເພື່ອສືບຕໍ່ ຕໍ່ສູ້ຕ້ານຈັກກະພັດຝຣັ່ງ ຢ່າງແຂງແຮງ.

3. ການກໍ່ສ້າງ ແລະ ຂະຫຍາຍການຈັດຕັ້ງຮາກຖານພັກ ແລະ ການນຳພາຕໍ່ສູ້ທາງດ້ານການເມືອງ.

ພາຍຫລັງພວກຝຣັ່ງ ໄດ້ເຂົ້າຢຶດເອົາເມືອງວຽງຈັນ ແລ້ວຄະນະພັກ ນະຄອນຫຼວງວຽງຈັນ ໄດ້ມີແຜນການຜັນຂະຫຍາຍການຈັດຕັ້ງພັກ ແລະ ພື້ນຖານການປະຕິວັດ ໄປສູ່ເຂດຊົນນະບົດ ໂດຍສຸມໃສ່ເຂດລ້ອງຕອນ (ບ້ານ ກົ້ວ) ກ່ອນໝູ່ ມາເຖິງປີ 1950 ການຂະຫຍາຍພັກ ໄດ້ເພີ່ມຂຶ້ນຢ່າງໄວວາທົ່ວ ນະຄອນຫລວງວຽງຈັນ ໄດ້ມີໜ່ວຍພັກ ແລະ ຄະນະຮັບຜິດຊອບຢູ່ 5 ເຂດຄື:

- ເຂດລ້ອງຕອນມີ:

ສະຫາຍ ຈານຕັນ (ພໍ່ຕຽງ)

ສະຫາຍ ທິດເຄນ (ພໍ່ສະແຫວງ)

ສະຫາຍ ທິດມ່ວນ ສາວຈັນທະລາ

ສະຫາຍ ຈັນມີ ດວງບຸດດີ

ສະຫາຍ ທິດຕົ້ນ.

- ເຂດເມືອງເຟືອງມີ:

ສະຫາຍ ພໍ່ຈຳປີ

ສະຫາຍ ທ້າວໄຊ

ສະຫາຍ ພໍ່ສີ

ສະຫາຍ ແມ່ເລີດ

ສະຫາຍ ພໍ່ອົ້ນ.

- ເຂດລ້ອງແມດ ມີ:

ສະຫາຍ ພໍ່ຄຳຕັນ

ສະຫາຍ ບົວຄຳ

ສະຫາຍ ຊຽງຈັນໄດ

ສະຫາຍ ຈານເກົ່ງ

ສະຫາຍ ທ້າວໄຊ.

- ເຂດທຸລະຄົມ ມີ:

ສະຫາຍ ຈານແກ່ນ ແພງນໍລິນ (ພໍ່ຖາວອນ)

ສະຫາຍ ຈັນທີ ຄຳມຸງຄຸນ (ພໍ່ບຸນເຫລືອ)

ສະຫາຍ ໄພສານ

ສະຫາຍ ຈາມສີ

ສະຫາຍ ບຸນແນມ.

- ເຂດນາໂງມນາຕາມ ມີ:

ສະຫາຍ ຈາມວັນ

ສະຫາຍ ທິດກອງ (ຄຳຜອງ)

ສະຫາຍ ພໍ່ສົມ

ສະຫາຍ ບົວແດງ

ສະຫາຍ ແມ່ຜົວ.

ໄປພ້ອມໆກັບການກໍ່ສ້າງ ແລະ ຂະຫຍາຍຮາກຖານການເມືອງ ດັ່ງກ່າວນັ້ນ ຄະນະພັກ ນະຄອນຫຼວງວຽງຈັນ ໄດ້ນຳພາປະຊາຊົນຢູ່ຕົວເມືອງ ແລະ ຊົນນະບົດຕໍ່ສູ້ທາງດ້ານການເມືອງ ເຊິ່ງຈຸດໜັກໃນເວລານັ້ນ ໄດ້ເລັ່ງໃສ່ຕໍ່ສູ້ຄັດຄ້ານການເກັບຄ່າຫົວ, ຄ່າພາສີຕ່າງໆ ທີ່ບໍ່ເປັນທຳ ການໃຊ້ແຮງງານໜັກ ແລະ ທວງໃຫ້ຈັກກະພັດຝຣັ່ງ ຕ້ອງມອບຄວາມເປັນເອກະລາດຢ່າງແທ້ ຈິງໃຫ້ແກ່ລາວ, ຮູບການໜຶ່ງແມ່ນໂຄສະນາປຸກລະດົມກຳລັງປະຊາຊົນ ໃຫ້ຂັດຂວາງການປະ ຕິບັດງານຕ່າງໆ ຂອງພວກຝຣັ່ງຕາມຮາກຖານ, ຊຸມ ແລະ ຫວ່ານໃບປົວ ແລະ ສິ່ງອື່ນໆ. ມາ ຮອດປີ1953 ຮາກຖານການເມືອງ ໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງຫລາຍກວ່າເກົ່າ ຢູ່ແຕ່ ລະເຂດໄດ້ຂະຫຍາຍໜ່ວຍພັກ ໄປຕາມບັນດາບ້ານພື້ນຖານທີ່ໝັ້ນເຊັ່ນ: ເຂດເມືອງ ເຟືອງ ໄດ້ ຂະຫຍາຍ ອອກໄປສູ່ເຂດວັງວຽງ ມີ: ນ້ຳເລົ້າ, ນາງາ, ນ້ຳມວງ, ນ້ຳປຸນ, ນ້ຳແປ, ນ້ຳຍາວ ແລະ ຜາຕັ້ງ.

ເຂດທຸລະຄົມໄດ້ຂະຫຍາຍຈາກນາເຫລືອງ, ນາເຄືອ, ແກ້ງນ້ອຍ ເວີນສານ ໄປເຂດລ້ອງ ຊານ, ພູຫວດ, ຜາລະແວກ, ນາເງິນ, ນາຍາງ, ໜອງພີງ ແລະ ໄຮຢ່ອນ.

ເຂດລ້ອງແມດ ກໍ່ໄດ້ຂະຫຍາຍເຂົ້າສູ່ເຂດເມືອງກາສີ ຄື: ບ້ານ ບວກ, ບ້ານ ແກ້ວ, ປ່າ ຫລັກ, ນາມິນ, ບ້ານ ທ່ຽງ, ເມືອງ ຊະນະຄາມ, ເມືອງ ປາກລາຍ ແລະ ອື່ນໆ.

ເຂດລ້ອງຕອນ ຊຶ່ງເປັນກົກເຄົ້າຂອງຮາກຖານການປະຕິວັດ ຂອງແຂວງນະຄອນຫຼວງ ວຽງຈັນ ກໍ່ໄດ້ຂະຫຍາຍກວ້າງຂວາງກວ່າໝູ່ຄື: ເຂດລ້ອງຕອນຂະຫຍາຍເຂົ້າສູ່ເຂດນາຊາຍທອງ ແລະ ໂພນໂຮງ ສະເພາະເມືອງ ໂພນໂຮງ ແມ່ນຢູ່ເຂດບ້ານ ໂນນນາຊຳ, ຂ້າມຊ້າງສົມດີ, ນາ ແຊະ ແລະ ນາຍາວ.

ດ້ານການປົກຄອງ: ໄປຄຽງຄູ່ກັບການຂະຫຍາຍຮາກຖານພັກ ໄປສູ່ບັນດາບ້ານ ທີ່ເປັນຮາກຖານຕ່າງໆ ແລ້ວຍັງໄດ້ເອົາໃຈໃສ່ປັບປຸງ ອຳນາດການປົກຄອງປະຕິວັດ ໃຫ້ກວ້າງຂວາງ ແລະ ແໜ້ນໜາຄື: ຢູ່ຂັ້ນບ້ານ ໄດ້ແຕ່ງຕັ້ງໃຫ້ມີກຳມະການບ້ານ ເອີ້ນວ່າ: ກຳມະການສາມຂາ (ບສຂ) ຊຶ່ງປະກອບມີ ດັ່ງນີ້:

(1). ຫົວໜ້າບ້ານ (ນາຍບ້ານ) ຮັບຜິດຊອບລວມ ແລະ ລົງເລິກດ້ານການເມືອງ.

(2). ຜູ້ຮອງແມ່ນຮັບຜິດຊອບດ້ານການທະຫານ.

(3). ກຳມະການຮັບຜິດຊອບ ດ້ານເສດຖະກິດ , ວັດທະນະທຳ - ສັງຄົມ.

ໄດ້ຈັດຕັ້ງມີໜ່ວຍ ແນວລາວອິດສະຫລະກອງໂຈນ (ກອງຫລອນ) ແລະ ໜ່ວຍຍຸວັນນາລີ ປະຈຳຢູ່ແຕ່ລະບ້ານ.

ຢູ່ແຕ່ລະເຂດພື້ນຖານ ຕໍ່ຕ້ານໄດ້ມີການຈັດຕັ້ງຕຳບົນຂຶ້ນ (ທຽບເທົ່າຕາແສງ) ເຊັ່ນ:ເຂດລ້ອງຕອນ, ເຂດເມືອງເຟືອງ, ເຂດລ້ອງແມດ, ເຂດກາສີ, ເຂດວັງວຽງ, ເຂດນາເຫລືອງ, ເຂດນາເຄືອ ແລະ ເຂດໂພນໂຮງ ຊຶ່ງແຕ່ລະຕຳບົນກໍ່ມີຄະນະຮັບຜິດຊອບຄື:

(1). ຫົວໜ້າຕຳບົນ (ຕາແສງ) ຮັບຜິດຊອບລວມ ແລະ ລົງເລິກດ້ານການເມືອງ.

(2). ຜູ້ຮອງຮັບຜິດຊອບ ທາງດ້ານການທະຫານ.

(3). ກຳມະການຮັບຜິດຊອບທາງດ້ານເສດຖະກິດ, ວັດທະນະທຳ - ສັງຄົມ.

ຢູ່ໃນຂັ້ນເມືອງ ໄດ້ສ້າງຕັ້ງມີຄະນະເມືອງຂຶ້ນ ຢູ່ຕາມເຂດທີ່ເປັນພື້ນຖານ ການປະຕິວັດ ເຊັ່ນ: ເຂດວຽງຈັນເໜືອ ກວມເອົາລ້ອງຕອນ, ເມືອງ ເຟືອງ ແລະ ລ້ອງແມດ, ເຂດວຽງຈັນໃຕ້ ກວມເອົາເຂດທົ່ງພຽງໂພນໂຮງ, ທຸລະຄົມລົງໄປຫາເຂດໃຈກາງນະຄອນຫຼວງວຽງຈັນ, ເຂດກາສີ, ວັງວຽງ ແລະ ເຂດເມືອງ ຍອດງຶ່ມ ຊຶ່ງກວມເອົາແຕ່ແກ້ງນ້ອຍເວີນສານ ຂຶ້ນໄປຮອດພູແຊ.

ສຳລັບຂັ້ນແຂວງນັ້ນກໍ່ໄດ້ມີການຈັດຕັ້ງເຈົ້າແຂວງຜູ້ທຳອິດຂຶ້ນ ໃນເດືອນ ສິງຫາ ປີ1949 ໂດຍແມ່ນ ພໍ່ຕູ້ສີ ບ້ານ ນາຄຳ, ເມືອງເ ຟືອງ, ຕາແສງເກົ່າ ຜູ້ຮັກຊາດ ໄດ້ຖືກແຕ່ງຕັ້ງເປັນເຈົ້າແຂວງປະຕິວັດຂອງ ນະຄອນຫຼວງວຽງຈັນຜູ້ທຳອິດ, ໂດຍແມ່ນສະຫາຍ ຄຳຕັນ ເປັນຮອງ ແລະ ສະຫາຍ ໄຊ ເປັນຄະນະ. ຕົກມາຮອດ ປີ 1951 ເມື່ອເຈົ້າແຂວງຜູ້ເກົ່າຄື ພໍ່ຕູ້ສີ ໄດ້ເຖົ້າແກ່ແລ້ວ ສະຫາຍ ທິດມ່ວນ ສາວຈັນທະລາ ໄດ້ຖືກແຕ່ງຕັ້ງເປັນເຈົ້າແຂວງຜູ້ທີສອງ ມີສະຫາຍ ຈັນມີດວງ ບຸດດີ ເປັນຮອງ ແລະ ສະຫາຍ ສະແຫວງ (ທິດເຄນ) ເປັນຄະນະ. ມາເຖິງ ເດືອນ ກໍລະກົດ ປີ 1954 ເມື່ອພວກຝຣັ່ງ ຖືກປະລາໄຊໃນສົງຄາມອິນດູຈີນ ໂດຍສະເພາະສະໜາມຮົບ ດຽນບຽນ ຟູຫວຽດນາມ, ຢູ່ລາວພວກເຂົາຍອມຮັບຮູ້ກຳລັງຝ່າຍປະເທດລາວ ແລະ ຮັບຮູ້ສອງແຂວງ ຄື: ແຂວງ ຫົວພັນ ແລະ ຜົ້ງສາລີ ເປັນຂອງຝ່າຍປະເທດລາວ. ເວລານັ້ນ, ຢູ່ນະຄອນຫລວງວຽງຈັນ

ປະຕິບັດຕາມຄຳສັ່ງຂອງສູນກາງພັກ ກຳລັງສ່ວນໃຫຍ່ໄດ້ຂຶ້ນໄປເຕົ້າໂຮມຢູ່ສອງແຂວງ ສ່ວນ ສະຫາຍ ທິດມ່ວນ ສາວຈັນທະລາ ຜູ້ເປັນເຈົ້າແຂວງ ກໍ່ໄດ້ຍ້າຍໜ້າທີ່ໄປຮັບຜິດຊອບເປັນຫົວ ໜ້າພະລາ ທິການຢູ່ສອງແຂວງ. ດັ່ງນັ້ນ ສູນກາງຈຶ່ງໄດ້ແຕ່ງຕັ້ງ ພໍ່ສະແຫວງ ໃຫ້ເປັນເຈົ້າແຂວງ ຜູ້ທີສາມ ເພື່ອຄ່ອນໄຫວຢູ່ແນວຫລັງ ໃນນີ້ກໍ່ມີຈາມຕັນ (ພໍ່ຕຽງ) ເປັນຮອງ ແລະ ມີພະນັກງານ ການນຳຈຳນວນໜຶ່ງຢູ່ເປັນຄະນະ.

4. ການກໍ່ສ້າງ ແລະ ນຳພາກຳລັງປະກອບອາວຸດຕໍ່ຕ້ານຝຣັ່ງ:

ໂດຍສືບຕໍ່ປະຕິບັດໜ້າທີ່ລວມ ຂອງພັກກອມມູນິດອິນດູຈີນ ກໍ່ຄືຄະນະພັກແຄ້ວນລາວ ຄັ້ງວັນທີ 25 ພະຈິກ ປີ 1945 ທີ່ວ່າ: **" ເພີ່ມທະວີວຽກງານໂຄສະນາປະກອບອາວຸດ, ປຸກລຸກຂົບ ຂວາຍ ປະຊາຊົນ ຢູ່ຊົນນະບົດ ເຮັດໃຫ້ແນວຮົບຕໍ່ຕ້ານຝຣັ່ງ ຢູ່ລາວຂະຫຍາຍຕົວກວ້າງອອກ ແລະ ເຮັດໃຫ້ສົງຄາມກອງໝູນ ຂະຫຍາຍຕົວຢູ່ຕາມຊົນນະບົດ, ປິດລ້ອມທະຫານຝຣັ່ງຢູ່ປ້ອມ ຄ້າຍ ແລະ ກວາດລ້າງພວກເຂົ້າອອກຈາກດິນລາວນັ້ນ ".** ຄະນະພັກນະຄອນຫຼວງວຽງຈັນ ໄດ້ ປະສານສົມທົບແໜ້ນລະຫວ່າງການກໍ່ສ້າງຮາກຖານການເມືອງ, ການສ້າງ ແລະ ຂະຫຍາຍກຳ ລັງປະກອບອາວຸດ ແລະ ການເຄື່ອນໄຫວຕີຕ້ານຝຣັ່ງ ໃນແຕ່ລະບາດກ້າວ ດັ່ງນີ້:

ໃນເວລາທີ່ລັດຖະບານລາວຕໍ່ຕ້ານ (ລັດຖະບານລາວອິດສະຫລະ) ຖອຍອອກຈາກຕົວ ເມືອງວຽງຈັນ, ສ່ວນໜຶ່ງກໍ່ໄດ້ຫລົບຫລີກເຂົ້າປ່າອອກສູ່ຊົນນະບົດ, ອີກຈຳນວນໜຶ່ງໄດ້ອົບພະ ຍົກໄປຢູ່ຝັ່ງໄທ ໃນຕົ້ນເດືອນ ເມສາ ປີ 1946 ນັ້ນ ໂດຍມີກຳລັງປະກອບອາວຸດຈຳນວນໜຶ່ງໄປ ນຳ ເພື່ອຝຶກອົບຮົມເພີ່ມທັດສະນະຫລັກໝັ້ນປະຕິວັດ, ອີກຈຳນວນ 18 ຄົນ ໄດ້ສືບຕໍ່ຢູ່ເຄື່ອນ ໄຫວສະກັດລັດຕີທະຫານຝຣັ່ງ ນັບແຕ່ປາກນ້ຳງື່ມ ຂຶ້ນມາຮອດພູເຂົ້າຄວາຍ, ບ້ານ ເກີ່ນ, ໂພນ ໂຮງ, ເມືອງ ເຟືອງ, ລ້ອງແມດ ແລະ ລ້ອງຕອນ, ກອງດັ່ງກ່າວຮັບຜິດຊອບ ໂດຍສະຫາຍ ບຸນ ຂວາ ແລະ ສະຫາຍ ບຸນຊູ ສີໄພງາມ ທຳອິດມີປືນພຽງແຕ່ 2 ກະບອກ ຮອດຕົ້ນເດືອນ ມັງກອນ ປີ 1947 ສະຫາຍ ໝັ້ນ ສົມວິຈິດ ໄດ້ຂ້າມຂອງມາແຕ່ໄທ ພ້ອມກັບກຳລັງປະກອບອາວຸດ 24 ຄົນ ມາລວມກັບກຳລັງທີ່ພວມເຄື່ອນໄຫວຢູ່ ພາຍໃນຂອບເຂດ ນະຄອນຫຼວງວຽງຈັນ 18 ຄົນ ນັ້ນ ແລ້ວໄດ້ຈັດຕັ້ງເປັນກອງກຳລັງປະກອບອາວຸດ ກອງທຳອິດຂອງ ນະຄອນຫຼວງວຽງຈັນ ຂຶ້ນ ເອີ້ນວ່າ: (ກອງຟ້າງຸ່ມ) ຕາມໃບແຕ່ງຕັ້ງຂອງ ເຈົ້າ ເພັດສະລາດ ໃນຄະນະຮັບຜິດຊອບມີ:

(1). ສະຫາຍ ໝັ້ນ ສົມວິຈິດ ເປັນຫົວໜ້າ.

(2). ສະຫາຍ ບຸນຂວາ ເປັນຮອງ.

ຕໍ່ການແຕ່ງຕັ້ງ ດັ່ງກ່າວນີ້ ບຸນຂວ ບໍ່ພໍໃຈຍ້ອນບໍ່ໄດ້ເປັນຫົວໜ້າ ກໍ່ເລີຍຂ້າມໄປໄທເພື່ອຕໍ່ວ່າ ເຈົ້າ ເພັດສະລາດ ແຕ່ເຈົ້າ ເພັດສະລາດ ຍັງເຫັນດີຕາມການຕົກລົງເດີມ, ບຸນຂວ ເລີຍຂ້າມຂອງກັບຄືນມາ ແລ້ວຮ່ວມມືກັບຝຣັ່ງ ພາຍລຸນມາ ບຸນຂວ ນຳກຳລັງໄປຂົ່ມຂວາຍເອົາສະຫາຍ ໝື່ນ ສົມວິຈິດ ມາຍອມຝຣັ່ງ ຖ້າບໍ່ໄດ້ຈະໃຊ້ກຳລັງຕີ, ສະຫາຍ ໝື່ນ ສົມວິຈິດ ຮູ້ສະພາບໄດ້ໃຊ້ກຳລັງເຂົ້າມາຕີເຮັດໃຫ້ ບຸນຂວ ຕາຍຄາທີ່ຢູ່ເຮືອນແມ່ຂອນ, ບ້ານ ເມືອງໝື່ນ, ເມືອງເຟືອງ, ແຂວ ວຽງຈັນ ປະຈຸບັນເວລານີ້ ສະຫາຍ ໝື່ນ ສົມວິຈິດ ໄດ້ແຕ່ງຕັ້ງໃຫ້ສະຫາຍ ບຸນຊູ ສີໄພງາມ ເປັນຮອງ, ພາຍຫລັງການສ້າງຕັ້ງກອງ ຟ້າງຸ່ມ ແລ້ວສະຫາຍ ໝື່ນ ສົມວິຈິດ ໄດ້ສັບຊ້ອນກຳລັງຈຳນວນໜຶ່ງ ທີ່ເຄີຍເຄື່ອນໄຫວຢູ່ກັບທີ່ມາກ່ອນ ໄປຮຽນຢູ່ໄທຈຳນວນໜຶ່ງ ໄດ້ສືບຕໍ່ການເຄື່ອນໄຫວສະກັດລັດຕີສັດຕູ ແລະ ເລືອກເອົາພະນັກງານຫົວຈັກຫລັກແຫລ່ງຈຳນວນໜຶ່ງ ໄປສົມທົບກັບຄະນະພັກ ຢູ່ແຕ່ລະເຂດ ເພື່ອປຸກລະດົມຂົ່ມຂວາຍ ຂະຫຍາຍກຳລັງ ປະກອບອາວຸດ ຄື:

(1). ສະຫາຍ ມາຍ ໄປເຂດລ້ອງແມດ
(2). ສະຫາຍ ຄຳສີ ໄປເມືອງ ເຟືອງ
(3). ສະຫາຍ ສະໄຫວ ໄປເຂດທຸລະຄົມ
(4). ສະຫາຍ ບຸນຊູ ສີໄພງາມ ໄປເຂດລ້ອງຕອນ.

ແຕ່ລະສະຫາຍ ທີ່ລົງໄປຮັບຜິດຊອບແຕ່ລະເຂດ ດັ່ງກ່າວນັ້ນໄດ້ຕັ້ງໜ້າໂຄສະນາປຸກລຸກນຳ້ໃຈຮັກຊາດ ຄຽດແຄ້ນສັດຕູຕໍ່ສູ້ກັບຝຣັ່ງ ຂົ່ມຂວາຍຊັກຊວນເອົາຊາວໜຸ່ມ ຊາຍສະກັນ ອອກມາເປັນກຳລັງປະກອບອາວຸດ ຈົນຮອດຕົ້ນປີ 1949 ແຕ່ລະເຂດໄດ້ມາເຕົ້າໂຮມກັນ ພ້ອມທັງໄດ້ເອົາຊາວໜຸ່ມຜູ້ຕື່ນຕົວ ຈາກແຕ່ລະເຂດມາປະກອບເພີ່ມໃຫ້ກອງຟ້າງຸ່ມ ເວລານັ້ນໝົດກອງຟ້າງຸ່ມ ມີຈຳນວນພົນ 100 ກວ່າຄົນ, ເມື່ອເຫັນວ່າກຳລັງໄດ້ເຕີບໃຫຍ່ ຄືແນວນັ້ນ ສະຫາຍ ໝື່ນ ສົມວິຈິດ ໄດ້ປັບປຸງກອງຟ້າງຸ່ມຄືນໃໝ່ ໂດຍໄດ້ແຕ່ງຕັ້ງໃຫ້ສະຫາຍ ຄຳສີ ເປັນຫົວໜ້າການທະຫານ, ສະຫາຍ ສະໜອງ ເປັນຫົວໜ້າການເມືອງ ທັງເປັນເລຂາໜ່ວຍພັກ (ນັບຕັ້ງແຕ່ເວລາປັບປຸງໃໝ່ກອງນີ້ເອີ້ນວ່າ: ກອງຮ້ອຍ7) ເວລາປັບປຸງສຳເລັດໃໝ່ໆກອງຮ້ອຍ 7 ໄດ້ເຄື່ອນໄຫວຢູ່ສະເພາະ ແຕ່ເຂດເມືອງ ເຟືອງ ຈົນຮອດປີ 1950 ຈຶ່ງໄດ້ເຄື່ອນໄຫວມາເຂດທຸລະຄົມ ມາຢູ່ເຂດນາເຫລື້ອງ, ນາເຄືອ.

ເມື່ອເຫັນວ່າ: ສະພາບຄວາມຮຽກຮ້ອງຕ້ອງການ ດ້ານກຳລັງຢູ່ແຕ່ລະເຂດມີຫລາຍ ມາຮອດທ້າຍ ປີ 1950 ການນຳຂອງແຂວງຈຶ່ງຕົກລົງສັບຊ້ອນກຳລັງຈຳນວນໜຶ່ງ ຈາກກອງຮ້ອຍ 7 ໄປຊ່ວຍຢູ່ເຂດອື່ນອີກຄື: ໃຫ້ໝວດໜຶ່ງໄປວຽງຈັນໃຕ້ (ບໍລິຄຳໄຊ) ແລະ ອີກໝວດໜຶ່ງໄປເຂດ

ໂພນໂຮງ ຈົ່ງໄວ້ແຕ່ 68 ສະຫາຍ, ແລ້ວຈົ່ງເອົາສະຫາຍ ສີທອງ (ສີທອງວິລະຊົນ) ຈາກກອງຕີພິເສດ ແລະ ສະຫາຍ ອຸໄດ ຈາກເຂດຍ່ອຍນາເຄືອ ມາຮັບຜິດຊອບເປັນຫົວໜ້າໝວດ ຢູ່ກອງຮ້ອຍ 7 ແທນ ໂດຍໃຫ້ສະຫາຍ ສີທອງ ເປັນຫົວໜ້າໝວດໜຶ່ງ, ສະຫາຍ ອຸໄດ ເປັນຫົວໜ້າໝວດສອງ ຈາກນັ້ນ, ກໍ່ໄດ້ແຕ່ງຕັ້ງນາຍທະຫານ ທີ່ເປັນກຳມະນຳ ຈຳນວນໜຶ່ງ ໄປຊ່ວຍກຳລັງທ້ອງຖິ່ນແຕ່ລະເຂດຄື:

(1). ສະຫາຍ ທິດສີ ໄປຊ່ວຍເຂດວຽງຈັນໃຕ້

(2). ສະຫາຍ ທິດດີ ໄປເຂດລ້ອງຕອນ

(3). ສະຫາຍ ສະໄຫວ ລົງເລິກໃຈກາງນະຄອນຫລວງວຽງຈັນ.



ສະເດັດເຈົ້າ ສຸພານຸວົງ ປະດັບຫລຽນໄຊ ໃຫ້ນັກຮົບແຂ່ງຂັນ ສີທອງ ປີ 1956

ກຳລັງທີ່ເຫລືອທັງໝົດໄດ້ສົ່ງໄປຮຽນຢູ່ຫວຽດນາມ ໃນເດືອນ 5 ປີ 1951 ພາຍຫລັງຮຽນສຳເລັດແລ້ວໃນເດືອນ ເມສາ ປີ 1952 ປະທານ ສຸພານຸວົງ ໄດ້ຕາງໜ້າໃຫ້ສູນກາງໄປຮ່ວມພິທີສະຫລຸບການຮຽນ ພ້ອມທັງໄດ້ປະກາດໃຫ້ກອງຮ້ອຍ 7 ເປັນກອງຟ້າງຸ່ມຄືນໃໝ່, ກອງປະກອບອາວຸດທີ່ປະກາດສ້າງຕັ້ງຂຶ້ ພ້ອມກັບກອງຟ້າງຸ່ມ ຄັ້ງນີ້ມີ:

(1). ຢູ່ພາກໃຕ້ແມ່ນ ກອງໄຊຈັກກະພັດ

(2). ຢູ່ພາກກາງແມ່ນ ກອງໄຊເສດຖາ

(3). ຢູ່ຊຽງຂວາງແມ່ນ ກອງເຈົ້າຟ້າປັດໃຈ.

ຫລັງຈາກກັບຄືນມາປະເທດແລ້ວໄປພ້ອມກັນກັບການຂົນຂວາຍກໍ່ສ້າງ ແລະ ປັບປຸງກຳລັງກອງປະກອບອາວຸດຂອງ ນະຄອນຫຼວງວຽງຈັນ (ກອງຟ້າງຸ່ມ) ກໍ່ໄດ້ສືບຕໍ່ເຄື່ອນໄຫວສົມທົບກັບກຳລັງທ້ອງຖິ່ນ ແຕ່ລະເຂດສະກັດລັດຕີ ແລະ ບຸກຕີສັດຕູຍາດໄດ້ໄຊຊະນະ ເປັນກ້າວໆ, ພວກເຮົາຍິ່ງປຸກລະດົມຂົນຂວາຍປະຊາຊົນເທົ່າໃດ ກໍ່ຍິ່ງມີກຳລັງແຮງເພີ່ມຂຶ້ນຕໍ່ສູ້ກັບສັດຕູ, ຍິ່ງເຄື່ອນໄຫວຕີສັດຕູເທົ່າໃດກໍ່ຍິ່ງເຂັ້ມແຂງ ແລະ ຍາດໄດ້ໄຊຊະນະລຸ່ນຕິດ, ເດັ່ນກວ່າໝູ່ແມ່ນ ວັນທີ 3 ມັງກອນ ປີ 1946 ໄດ້ໂຈມຕີທະຫານສັດຕູໜຶ່ງກອງພັນຢູ່ ທ່າເດື່ອ ຈັບສະເລີຍເສິກ ທະຫານຝຣັ່ງໄດ້ 2 ບັກ ແລະ ທະຫານຫຸ່ນລາວ 6 ບັກ. ນອກນັ້ນ, ຍັງຢຶດອາວຸດໄດ້ຈຳນວນຫລາຍສົມຄວນ ສ່ວນທີ່ເຫລືອຕາຍກໍ່ແຕກຖອຍໄປ.



ສະຫາຍ ໄກສອນ ພົມວິຫານ ປະດັບຫລຽນໄຊໃຫ້ນັກຮົບແຂ່ງຂັນ ປີ 1956

ຕໍ່ມາວັນທີ 22 ມັງກອນ ປີ 1946 ໄດ້ບຸກໂຈມຕີດັບສູນສັດຕູ 4 ປ້ອມ ຢູ່ບ້ານ ເກີນ.

ມາເຖິງເດືອນ ມີຖຸນາ ປີ 1947 ສະຫາຍ ໝື່ນ ສົມວິຈິດ ໄດ້ນຳພາກຳລັງເຂົ້າຢຶດເອົາປືນຂອງສັດຕູຢູ່ຄ້າຍສາມໝື່ນໄດ້ປືນ 15 ກະບອກ.

ເດືອນ ເມສາ ປີ 1950 ສະຫາຍ ຄຳຕັນ ໄດ້ພາອ້າຍນ້ອງລັດຕິເຮືອຈັກຂອງພວກຝຣັ່ງ ຢູ່ ປາກຊັນ ຢຶດປືນໄດ້ 6 ກະບອກ, ໂສ້ງເສື້ອ 300 ຊຸດ ຂ້າສັດຕູຕາຍ 3 ບັກ ແລະ ແຫ່ງອື່ນໆ ອີກ.

ໃນປີ 1950 ກອງໂຄສະນາປະກອບອາວຸດ ຮັບຜິດຊອບສາຍ ທາງເລກທີ 13 ເໜືອແຕ່ເມືອງ ນາຊາຍທອງ, ໂພນໂຮງ ບັນຊາໂດຍສະຫາຍ ຊຽງແກ່ນ ໄດ້ບຸກໂຈມຕີສັດຕູທີ່ອອກມາ

ກອາດລ້ຽງຢູ່ບັນດາບ້ານຢ່າງຕໍ່ເນື່ອງເຊັ່ນ: ຕີຢູ່ບ້ານ ນາງ່າ 2 ຄັ້ງຂ້າສັດຕູຕາຍ 4 ບັກໃນນັ້ນມີຝຣັ່ງ 1 ບັກ ແລະ ບາດເຈັບໜັກ 2 ບັກ; ຕີຢູ່ບ້ານ ໂພນມ່ວງ 1 ຄັ້ງ ຂ້າສັດຕູຕາຍ 2 ບັກ ໃນນັ້ນມີຝຣັ່ງ 1 ບັກ ບາດເຈັບໜັກ 3 ບັກ ຕີຢູ່ບ້ານ ໂພນທັນ 1 ຄັ້ງ ຂ້າສັດຕູຕາຍ 2 ບັກ ບາດເຈັບໜັກ 1 ບັກ ແລະ ຕີປົດຄ້າຍທີ່ຕັ້ງ ຂອງສັດຕູຢູ່ບ້ານແຮ 2 ຄັ້ງ ເຮັດໃຫ້ສັດຕູອົກສັ່ນຂັວນຫາຍ.

ໃນເມື່ອມີອາວຸດ ແລະ ກຳລັງພົນເພີ່ມຂຶ້ນຫລາຍສົມຄວນແລ້ວ ກອງໂຄສະນາປະກອບອາວຸດກໍ່ໄດ້ເຮັດທັງໜ້າທີ່ສະກັດຫລອນຕີ ແລະ ໂຄສະນາຈົນຂົນຂວາຍກຳລັງທະຫານສັດຕູໃຫ້ໂຕນມາຫາກຳລັງປະຕິວັດ ຕົວຢ່າງ ສະຫາຍ ອຸໄດ ທີ່ເປັນຫົວໜ້າໝວດຢູ່ກອງຟ້າງຸ່ມ ກໍ່ແມ່ນອາດີດທະຫານ ປາກຕີຊັງ ຂອງຝຣັ່ງ ທີ່ມີຄວາມຕື່ນຕົວຮັກຊາດ ຄຽດແຄ້ນຝຣັ່ງ ແລ້ວຊັກຊວນເອົາໝູ່ 7 ຄົນ ພ້ອມອາວຸດຄົບມືໂຕນມາຮ່ວມກັບກຳລັງປະຕິວັດ ໃນເດືອນ ກຸມພາ ປີ 1948.

5. ກົນອຸບາຍໃໝ່ຂອງຈັກກະພັດຝຣັ່ງ ເພື່ອດັບມອດກຳລັງປະຕິວັດຢູ່ລາວ.

ເມື່ອພວກຝຣັ່ງ ຄົ້ນຄວ້າເຫັນວ່າການປະຕິບັດຕາມນະໂຍບາຍແບບເກົ່າ ທີ່ໃຊ້ມາໃນໄລຍະປີ 1946 - 1948 ນັ້ນແມ່ນບໍ່ສາມາດດັບສູນກຳລັງຕໍ່ຕ້ານ ຂອງປະຊາຊົນລາວ ໃຫ້ໝົດກ້ຽງໄດ້ກົງກັນຂ້າມຊ້ຳ ພັດນັບມື້ເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ. ດັ່ງນັ້ນ ເພື່ອລົບລ້າງຂະບວນການລາວອິດສະຫລະ ກໍ່ຄືຂະບວນການຕໍ່ສູ້ດ້ວຍກຳລັງປະກອບອາວຸດ ຂອງປະຊາຊົນລາວໃຫ້ໝົດໄປນັ້ນ. ຈັກກະພັດຝຣັ່ງ ຈຶ່ງໄດ້ມີກົນອຸບາຍຫລອກລວງແບບໃໝ່ ຄືໃຫ້ຄວາມເປັນເອກະລາດແກ່ລາວໃນດ້ານຮູບການ. ສ່ວນສິດການປົກຄອງແມ່ນຍັງຂຶ້ນກັບຝຣັ່ງຄືເກົ່າ. ເມື່ອໄດ້ກຳນົດກົນອຸບາຍໃໝ່ເປັນທີ່ຮຽບຮ້ອຍແລ້ວ. ປະທານາທິບໍດີຝຣັ່ງແວງຊັງໂອລິອົນ ຈຶ່ງໄດ້ເຊີນເອົາເຈົ້າຊີວິດສີສະຫວ່າງວົງ ພ້ອມດ້ວຍບໍລິວານໄປຢ້ຽມຢາມປະເທດຝຣັ່ງ ເນື້ອແທ້ແມ່ນໄປເຊັນສັນຍາຝຣັ່ງເສດ - ລາວ ໃນວັນທີ 19 ເດືອນ ກໍລະກົດ ປີ 1949 ຢູ່ທີ່ ເມືອງ ປາຣີ (ສະບັບທີ່ເອີ້ນວ່າ: " ກົງວັງຊິງ " ຝຣັ່ງ - ລາວ 19 ກໍລະກົດ 1949) ສັນຍາດັ່ງກ່າວ ໄດ້ຮັບຮູ້ຄວາມເປັນເອກະລາດຂອງລາວໃນດ້ານຮູບການ, ແຕ່ເນື້ອແທ້ແມ່ນຝຣັ່ງ ຍັງຮັກສາສິດຕັດສິນບັນຫາທີ່ກ່ຽວຂ້ອງກັບດິນແດນຂອງລາວ ລວມທັງສິດໃນການຈັດວາງກຳລັງປະກອບອາວຸດຂອງຝຣັ່ງ ແລະ ສ້າງຕັ້ງຖານທັບທະຫານກໍ່ຄືການປ້ອງກັນຊາຍແດນຂອງລາວ.

ສົນທິສັນຍາຝຣັ່ງ - ລາວ ທີ່ເຊັນກັນຢູ່ປາຣີ ໃນຄັ້ງນັ້ນໄດ້ສົ່ງຜົນສະທ້ອນເຂົ້າໃສ່ຂະບວນການລາວອິດສະຫລະຖືກຜັນແຍກຄື: ຂັ້ນນຳຂອງຂະບວນການອິດສະຫລະ ຈຳນວນໜຶ່ງລວມທັງພະຍາ ຄຳມ້າວ ວິໄລ ເຊິ່ງເປັນນາຍົກລັດຖະມົນຕີຂອງລັດຖະບານລາວອິດສະຫລະທີ່ຢູ່ປະເທດໄທ ເວລານັ້ນ ໄດ້ຕົກລົງໃຈກັບຄືນມາຫາລາຊະອານາຈັກ ແລະ ຮ່ວມມືກັບຝຣັ່ງ ຍ້ອນຄິດວ່າ: ສົນທິສັນຍາ ປີ 1949 ໄດ້ຮັບຮູ້ຄວາມເປັນເອກະລາດ ຂອງລາວຢ່າງສົມບູນແລ້ວ, ພວກ

ຝຣັ່ງ ໄດ້ໃຫ້ຄວາມຮັບປະກັນຄວາມປອດໄພ ແລະ ບໍ່ເອົາໂທດເອົາໂພຍຫຍັງ ຕໍ່ພວກທີ່ກັບຄືນດັ່ງກ່າວ ແລະ ເກືອບໝົດທຸກຄົນເວລານັ້ນ ໄດ້ຮັບຕຳແໜ່ງສູງ ໃນກົງຈັກລັດຖະບານລາຊະອານາຈັກ, ສ່ວນສະເດັດເຈົ້າ ສຸພານຸວົງ ແລະ ຜູ້ນຳແນວລາວອິດສະຫລະຈຳນວນໜຶ່ງ ທີ່ເບິ່ງກວ້າງເຫັນໄກໄດ້ເຂົ້າໃຈວ່າ: ການປະກາດໃຫ້ຄວາມເປັນເອກະລາດ ແກ່ລາວຂອງພວກຝຣັ່ງເວລານັ້ນ ແມ່ນຈອມປອມເພາະຝຣັ່ງຍັງມີສິດອຳນາດສຳຄັນຫລາຍດ້ານໃນລາວ. ດັ່ງນັ້ນ, ເອກະລາດດັ່ງກ່າວນີ້ ຈຶ່ງເປັນພຽງການຫລອກລວງ ເພື່ອແນໃສ່ເຮັດໃຫ້ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ສະຫລາຍຕົວດ້ວຍເຫດນີ້ ບັນດາສະຫາຍຜູ້ນຳທີ່ຮັກຊາດ ຈຶ່ງຕັດສິນໃຈອອກຈາກປະເທດໄທ ຂ້າມຂອງມາລາວ ແລ້ວມຸ້ງໜ້າສູ່ເຂດທີ່ໝັ້ນແຂວງ ຫົວພັນ ເພື່ອສົມທົບກັບບັນດາຜູ້ນຳຂະບວນການປະຕິວັດອື່ນໆ ສືບຕໍ່ນຳພາປະຊາຊົນສ້າງຕັ້ງກຳລັງຕໍ່ຕ້ານຢູ່ໃນເຂດທີ່ໝັ້ນຊົນນະບົດຂຶ້ນ. ເມື່ອຮອດແຂວງ ຫົວພັນ ແລ້ວ ສະເດັດເຈົ້າ ສຸພານຸວົງ ກໍ່ໄດ້ຮ່ວມກັບ ສະຫາຍ ໄກສອນ ພົມວິຫານ, ສະຫາຍ ໜູຮັກ ພູມສະຫວັນ ແລະ ຜູ້ນຳອື່ນໆ. ຄົ້ນຄວ້າແນວທາງການປະຕິວັດເພື່ອຕໍ່ສູ້ກູ້ຊາດ ແລະ ກະກຽມເງື່ອນໄຂຕ່າງໆ ເພື່ອດຳເນີນ ກອງປະຊຸມໃຫຍ່ ແນວລາວອິດສະຫລະ ແລະ ສ້າງຕັ້ງລັດຖະບານລາວຕໍ່ຕ້ານຂຶ້ນ ຢູ່ເຂດທີ່ໝັ້ນດັ່ງກ່າວ.

6. ການຕໍ່ສູ້ຕີເອົາຊະນະຈັກກະພັດຝຣັ່ງ ຂັ້ນສຸດທ້າຍ ປີ 1950 - 1954.

ມາເຖິງທ້າຍປີ 1949 ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ຕ້ານພວກລ່າເມືອງຂຶ້ນຝຣັ່ງ ໄດ້ຂະຫຍາຍຕົວຢ່າງແຂງແຮງ ແລະ ເລີ່ມຕົ້ນມີພື້ນຖານອັນແໜ້ນໜາໃນທົ່ວປະເທດໃນແຕ່ລະເຂດ, ອົງການຈັດຕັ້ງມະຫາຊົນ ທີ່ມີລັກສະນະແນວໂຮມປວງຊົນ ກໍ່ໄດ້ຮັບການກໍ່ສ້າງຂຶ້ນ ແລະ ໄດ້ຂະຫຍາຍຕົວພໍສົມຄວນ ເຊັ່ນ: " ສະມາຄົມລາວກູ້ຊາດ ", " ລາວຮ່ວມ ໃຈ ","ສະມາຄົມກົມມະດຳ ກູ້ຊາດ "... ນອກນັ້ນກໍ່ມີສະມາຄົມຊາວໜຸ່ມ, ແມ່ຍິງ, ອາວຸໂສຜູ້ຊົງຄຸນວຸດທິຮັກຊາດ ແລະ ອື່ນໆ ທີ່ໄດ້ເກີດຂຶ້ນຕາມສະພາບແວດລ້ອມ ແລະ ເງື່ອນໄຂຕົວຈິງຂອງແຕ່ລະເຂດ.

ອີງໃສ່ຈຸດພິເສດຂອງແຕ່ລະເຂດ ກຳລັງປະກອບອາວຸດ ໄດ້ກຳເນີດເກີດຂຶ້ນ ແລະ ຂະຫຍາຍຕົວຫຼາຍພໍສົມຄວນເຊັ່ນ: ການສ້າງຕັ້ງກອງລາດຊະວົງ ຢູ່ເຂດຊຳເໜືອ, ກອງໄຊເຊດຖາທິລາດ, ກອງໄຊຈັກກະພັດ, ກອງຟ້າງຸ່ມ, ກອງປັດໄຈໄດ້ຖືກສ້າງຂຶ້ນຕາມໆກັນ ແລະ ໄດ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ເຮັດໃຫ້ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ນັບມື້ນັບຂະຫຍາຍຕົວຂຶ້ນເລື້ອຍໆ ສົມທົບກັບສະພາບການທົ່ວອິນດູຈີນ ແລະ ສະພາບການຂອງໂລກ ໃນເວລານັ້ນ ໄດ້ມີການປ່ຽນແປງໃນຫລາຍດ້ານ ສ້າງເງື່ອນໄຂອັນສະດວກ ໃຫ້ແກ່ພາລະກິດປະຕິວັດຢູ່ປະເທດເຮົາ. ຕໍ່ໜ້າການເຕີບໃຫຍ່ຂະຫຍາຍຕົວ ຂອງຂະບວນການຕໍ່ສູ້ປະຕິວັດຄືດັ່ງກ່າວ ມັນຈຶ່ງຮຽກຮ້ອງໃຫ້ມີການນຳພາທີ່ເອກະພາບ ແລະ ມີການເຕົ້າໂຮມບັນດາການຈັດຕັ້ງເຂົ້າເປັນອັນ

ໜຶ່ງອັນດຽວ, ປະຕິບັດຕາມແນວທາງນະໂຍບາຍ ແລະ ຫລັກການທີ່ເອກະພາບກັນໃນທົ່ວປະເທດ, ຜູ້ນຳການປະຕິວັດລາວ ໄດ້ເຫັນແຈ້ງຄວາມຈຳເປັນພາວະວິໄສດັ່ງກ່າວນັ້ນ, ເມື່ອສະເດັດເຈົ້າ ສຸພານຸວົງ ໄດ້ໄປເຖິງເຂດທີ່ໝັ້ນ ແຂວງ ຫົວພັນແລ້ວ ກໍ່ໄດ້ຮ່ວມກັບບັນດາຜູ້ນຳອື່ນໆ ກະກຽມ ແລະ ໄຂກອງປະຊຸມ ໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດຂຶ້ນ ໃນວັນທີ 13 ສິງຫາ ປີ 1950 ຢູ່ທີ່ຕຽນກວາງ (ຫວຽດນາມ) ມີຜູ້ແທນເຂົ້າຮ່ວມ 150 ສະຫາຍ ທີ່ເປັນຕົວແທນທີ່ແທ້ຈິງ ໃຫ້ແກ່ປະຊາຊົນທຸກຊັ້ນ, ເຜດໄອ, ສາສະໜາຈາກເຂດຕໍ່ຕ້ານ ແລະ ກວດກາຂອງສັດຕູໃນທົ່ວປະເທດ ໃນນັ້ນມີຕົວແທນ ຈາກນະຄອນຫລວງວຽງຈັນ 7 ສະຫາຍຄື:

1. ສະຫາຍ ໝື່ນ ສົມວິຈິດ
2. ສະຫາຍ ຕັນ
3. ສະຫາຍ ນາງ ເລັດ
4. ສະຫາຍ ບຸນຊູ ສີໄພງາມ
5. ສະຫາຍ ຈຳປີ
6. ສະຫາຍ ນາງ ບຸນໄທ
7. ສະຫາຍ ເອນິນ.

ກອງປະຊຸມໃຫຍ່ຄັ້ງປະຫວັດສາດ ນີ້ໄດ້ວາງແນວທາງການ ປະຕິວັດອັນເປັນເອກະພາບໃຫ້ແກ່ການຕໍ່ສູ້ກູ້ຊາດຄື ໄດ້ວາງໂຄງການ ການເມືອງ 12 ຂໍ້ ເຊິ່ງມີເນື້ອໃນສຳຄັນດັ່ງນີ້: **ໂຄ່ນລົ້ມພວກລ່າເມືອງຂຶ້ນຝຣັ່ງ ແລະ ພວກລູກແຫລ້ງຕົ້ນມືຂາຍຊາດ; ສ້າງປະເທດລາວ ໃຫ້ເປັນເອກະລາດ ເອກະພາບ ແລະ ວັດທະນະຖາວອນ. ປະຕິບັດສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ; ສະເໝີພາບລະຫວ່າງເຜົ່າ ແລະ ລະຫວ່າງຍິງ - ຊາຍ; ເສລີພາບໃນການເຊື່ອຖື; ຮີບຮີ້ຊັບສົມບັດ ຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ພວກລູກມືຜູ້ຂາຍຊາດ; ລົບລ້າງສ່ວຍສາອາກອນທີ່ບໍ່ຍຸຕິທຳ; ກໍ່ສ້າງ ແລະ ຂະຫຍາຍເສດຖະກິດ ທີ່ເປັນເອກະລາດ; ປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ; ລົບລ້າງໄພກືກໜັງສື; ຂະຫຍາຍວັດທະນະທຳ ແລະ ການສຶກສາຂອງຊາດ; ເພີ່ມທະວີຄວາມສາມັກຄີ ກັບສາກົນກ່ອນອື່ນແມ່ນຫວຽດນາມ ແລະ ກຳປູເຈຍ ພ້ອມກັນຕີຂັບໄລ່ສັດຕູໂຕດຽວກັນ ຄືພວກລ່າເມືອງຂຶ້ນຝຣັ່ງ ແລະ ອາເມລິກາ ຜູ້ແຊກແຊງ; ປະກອບສ່ວນປົກປັກ ຮັກສາສັນຕິພາບໂລກ.**

ກອງປະຊຸມຄັ້ງນີ້ ໄດ້ເລືອກຕັ້ງເອົາຄະນະກຳມະການສູນກາງຂອງແນວລາວອິດສະຫລະ ແລະ ຈັດຕັ້ງລັດຖະບານລາວຕໍ່ຕ້ານຂຶ້ນ ໂດຍແມ່ນສະເດັດເຈົ້າ ສຸພານຸວົງ ເປັນນາຍົກລັດຖະມົນຕີ ແລະ ເປັນປະທານແນວລາວອິດສະຫລະ, ຜູ້ແທນທີ່ຖືກຄັດເລືອກຂຶ້ນມາດຳເນີນວຽກງານ

ໃນຖານະເປັນຄະນະກຳມະ ການສູນກາງແນວໂຮມ ນັ້ນລ້ວນແຕ່ແມ່ນນັກຕໍ່ຕ້ານຜູ້ທີ່ມີບົດບາດ ອິດທິພົນອັນດີຕໍ່ປະຊາຊົນທຸກຊັ້ນຄົນ, ທຸກຊົນເຜົ່າໃນແຕ່ລະທ້ອງຖິ່ນ, ແມ່ນຜູ້ທີ່ໄດ້ດຳເນີນການ ຕໍ່ສູ້ ແລະ ຈັດຕັ້ງນຳພາຂະບວນການຕໍ່ສູ້ກູ້ຊາດ ແຕ່ໄລຍະປີ 1945 ມາ ແລະ ເປັນຕົວແທນ ແຫ່ງກຳລັງສາມັກຄີປອງຊົນທັງຊາດ. ຄຽງຂ້າງສະເດັດເຈົ້າ ສຸພານຸວົງ ຍັງມີສະຫາຍ ໄກສອນ ພົມວິຫານ, ສະຫາຍ ໜູຮັກ ພູມສະຫວັນ, ສະຫາຍ ພູມີ ວົງວິຈິດ, ສະຫາຍ ຄຳໄຕ ສີພັນດອນ, ສະຫາຍ ພູນ ສີປະເສີດ, ເຈົ້າ ສຸກວົງສັກ ແລະ ພະນັກງານຜູ້ດີເດັ່ນອື່ນໆ ອີກ.



ລັດຖະບານລາວຕໍ່ຕ້ານ ປີ 1950

ລັດຖະບານລາວ ຕໍ່ຕ້ານທີ່ກອງປະຊຸມໃຫຍ່ສ້າງຕັ້ງຂຶ້ນເທື່ອນີ້ ແຕກຕ່າງກັບລັດຖະບານ ຊື່ວຄາວ ໃນເມື່ອກ່ອນຢ່າງຈະແຈ້ງ; ພາກສ່ວນປະກອບໃນຄະນະລັດຖະບານ ລ້ວນແຕ່ແມ່ນຜູ້ ທີ່ມີຖານະບົດບາດຕໍ່ປະຊາຊົນ ແລະຢຶດຖືອຸດົມການປະຕິວັດຢ່າງໜັກແໜ້ນເຊິ່ງມີບຸກຄົນດັ່ງນີ້:

1.ສະເດັດເຈົ້າ ສຸພານຸວົງ ເປັນນາຍົກລັດຖະມົນຕີ ແລະ ວ່າການລັດຖະມົນຕີກະ ຊວງການຕ່າງປະເທດ.

2. ສະຫາຍ ໄກສອນ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງ ກັນຊາດ.

3. ສະຫາຍ ພູມີ ວົງວິຈິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງພາຍໃນ.

4. ສະຫາຍ ໜູຮັກ ພູມສະຫວັນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ເສດຖະກິດ.

5. ເຈົ້າ ສຸກວິງສັກ ລັດຖະມົນຕີກະຊວງສຶກສາ.

6. ສະຫາຍ ສີທົນ ກົມມະດຳ ລັດຖະມົນຕີ.

7. ສະຫາຍ ໄຟດ່າງ ລໍເຫຼຍຢາວ ລັດຖະມົນຕີ.

ກອງປະຊຸມໃຫຍ່ແນວລາວອິດສະຫລະ ເມື່ອວັນທີ 13 ສິງຫາ ປີ 1950 ນີ້ ແມ່ນເຫດ ການໃຫຍ່ ແລະ ມີຄວາມໝາຍສຳຄັນທີ່ສຸດໃນຊີວິດການເມືອງ ຂອງປະຊາຊົນລາວ ເປັນເຫດ ການປະຫວັດສາດ ອັນຍິ່ງໃຫຍ່ ຂອງຂະບວນການຕໍ່ສູ້ປະຕິວັດຂອງຊາດລາວ, ມັນແມ່ນການ ເຕົ້າໂຮມບັນດາກຳລັງແຮງ ຂອງຊາດເຂົ້າເປັນໜຶ່ງດຽວ ທັງເປັນກ້ອນກຳລັງແຮງສາມັກຄີ ອັນ ແໜ້ນແກ່ນ ພາຍໃຕ້ການນຳພາຂອງພັກ; ມັນຍັງແມ່ນການກຳເນີດເກີດຂຶ້ນຂອງແນວໂຮມແຫ່ງ ຊາດເປັນເທື່ອທຳອິດຂອງຊາດ. ແນວໂຮມແຫ່ງຊາດ ນີ້ມີບົດບາດສຳຄັນທີ່ສຸດ ຕໍ່ການປຸກລະ ດົມນ້ຳໃຈຮັກຊາດ, ປັບປຸງສະຕິຊາດ ແລະ ສະຕິເອກະພາບພາຍໃນຊາດ ໂດຍເສີມຂະຫຍາຍ ບັນດາມູນເຊື້ອອັນດີງາມ ເຊິ່ງປະຊາຊົນບັນດາເຜົ່າໄດ້ມີມາແຕ່ບູຮານນະການ. (1)



ຄະນະກຳມະການສູນກາງ ແນວລາວອິດສະຫຼະ


---

(1) ປະຫວັດສາດລາວ ປີ 2000 ໜ້າ 753-757 ແລະປະຫວັດສາດພັກ ປີ 1997 ໜ້າ 68, ເອກະສານ ລຶງບຸນມາ ເຮືອງມະນີ.


ຫລັງຈາກສຳເລັດກອງປະຊຸມໃຫຍ່ ແລ້ວຄະນະຜູ້ແທນຈາກ ນະຄອນຫຼວງວຽງຈັນ ກໍ່ໄດ້ນຳເອົາແນວທາງການເມືອງ ທີ່ກອງປະຊຸມໄດ້ກຳນົດອອກນັ້ນ ມາເຜີຍແຜ່ປຸກລະດົມຂະບວນການຂອງມະຫາຊົນຢູ່ແຕ່ລະເຂດພາຍໃນແຂວງ ຊຶ່ງກ່ອນອື່ນໝົດຕ້ອງເຕົ້າໂຮມປະຊາຊົນບັນດາຊັ້ນຄົນເຂົ້າຮ່ວມການຕໍ່ສູ້ເພື່ອໃຫ້ໄດ້ມາຄວາມເປັນເອກະລາດອັນແທ້ຈິງ, ລົບລ້າງຮ່ອງຮອຍສັກດິນາ, ຂັບໄລ່ພວກຈັກກະພັດລ່າເມືອງຂຶ້ນຝຣັ່ງອອກຈາກປະເທດ, ພັດທະນາເສດຖະກິດແຫ່ງຊາດ, ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະ ເສີມຂະຫຍາຍສິດເສລີພາບ, ປະຊາທິປະໄຕຂອງປະຊາຊົນ, ພ້ອມນັ້ນກໍ່ປຸກລະດົມກຳລັງກອງຫລອນ ຢູ່ແຕ່ລະຮາກຖານນຳໃຊ້ທຸກປະເພດອາວຸດ ທີ່ມີນັບແຕ່ອັນປະຖົມປະຖານພື້ນເມືອງຄື: ໜ້າ, ເຮັດຂວາກ, ຮ່າວຫລາວແຫລມ, ປືນເພິ້ງ, ສະກັດລັດຕີສັດຕູຢູ່ແຕ່ລະເຂດຢ່າງກວ້າງຂວາງ ໂດຍສະເພາະແມ່ນຢູ່ເຂດລ້ອງຕອນ, ລ້ອງແມດ, ກາສີ, ພາກສ່ວນທະຫານທ້ອງຖິ່ນຂອງແຂວງ ກໍ່ອອກແຮງສົມທົບຕີສັດຕູ ຢູ່ຕາມຄ້າຍຕ່າງໆ ທັງຕີທັງຂົ່ມຂວາຍເອົາກຳລັງຂອງສັດຕູໄປພ້ອມໆກັນ, ເຮັດໃຫ້ຝຣັ່ງ ແລະ ລູກມືຂອງພວກເຂົາຖືກຂ້າຕາຍ ແລະ ບາດເຈັບນັບມື້ນັບຫລາຍຂຶ້ນ, ເມື່ອເຫັນວ່າ: ກຳລັງຕໍ່ສູ້ຂອງຊາວນະຄອນຫຼວງວຽງຈັນ ໄດ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນ ເລີ່ມແຕ່ທ້າຍປີ 1952. ມາພວກຝຣັ່ງ ແລະ ລູກມືຂອງພວກເຂົາຈຶ່ງໄດ້ຈັດຕັ້ງ ດຳເນີນການກວດລ້າງປາບປາມຂະບວນການຕໍ່ສູ້ຂອງປະຊາຊົນຢ່າງປ່າເຖື່ອນ ແລະ ໜັກໜ່ວງກວ່າເກົ່າ, ພວກເຂົາໄດ້ທຳການຈູດເຜົາເຮືອນຊານ, ຈັບກຸມຂຸມຂັງ, ທຸບຕີທໍລະມານປະຊາຊົນຜູ້ຮັກຊາດຢ່າງຫລວງຫລາຍຄື: ປີ1950 ສັດຕູຈູດບ້ານນາເທົ່າ, ນ້ຳແຜນ ແລະ ນາຂວາງເຂດລ້ອງແມດ ແລະ ອື່ນໆ, ປີ1953 ສະຫາຍ ສີທອງ (ສີທອງ ວິລະຊົນ) ພ້ອມພະນັກງານ, ນັກຮົບຈຳນວນຫລາຍສະຫາຍຖືກຈັບໄປຂັງຄຸກໃຫຍ່ຊຳເຄ ພວກເຂົາໃຊ້ໄຟຟ້າຈູດ ແລະ ທຸບຕີທໍລະມານໃຫ້ໄຂຄວາມລັບ ແຕ່ພະນັກງານ - ນັກຮົບເຮົາ ແຕ່ລະຄົນກໍ່ບໍ່ຍອມໄຂຄວາມລັບແຕ່ຢ່າງໃດ; ຢືນຢູ່ຕໍ່ໜ້າສະພາບການດັ່ງກ່າວນັ້ນ ຄະນະໜ່ວຍພັກແຕ່ລະເຂດໄດ້ນຳພາປະຊາຊົນ ຕໍ່ສູ້ຢ່າງເດັດດ່ຽວ ຕີຕ້ານສັດຕູຄືນຢ່າງແຂງແຮງ ແລະ ຮອບດ້ານ. ດ້ານເສດຖະກິດ ແມ່ນຊຸກເຊື່ອງສະບຽງອາຫານ, ດ້ານອາວຸດແມ່ນຊອກທຸກວິທີທາງເອົາອາວຸດສັດຕູຕີສັດຕູຊົນຂວາຍທະຫານຂ້າເສິກ ຖືອາວຸດໂຕນປະຖົມແຖວມາຫາກຳລັງປະຕິວັດຍາດເອົາອາວຸດຂ້າເສິກເວລາເຜີຕົວ ແລະ ອື່ນໆ ເທົ່າທີ່ຈະໄດ້ອາວຸດມາປະກອບ ແລ້ວໃຊ້ທຸກຮູບການ ບຸກໂຈມຕີສັດຕູຢູ່ປິດຄ້າຍຂອງເຂົາ ໄປພ້ອມກັນກັບສະກັດລັດຕີສັດຕູ ຕາມເສັ້ນທາງຕ່າງໆ ຢ່າງດຸເດືອດໄປພ້ອມກັນກັບຊົນຂວາຍທະຫານຂ້າເສິກ ລຸກຮື້ຂຶ້ນຂ້າຜູ້ບັນຊາການຢູ່ຄ້າຍເມືອງ ເຟືອງ ແລະ ວັງວຽງ ແລ້ວມາຮ່ວມມືນຳກຳລັງການປະຕິວັດ ທັງຕໍ່ສູ້ທາງອາວຸດ ແລະ ຕໍ່ສູ້ທາງດ້ານການເມືອງ ຂຽນຄຳຂວັນ ທວງເອົາເອກະລາດ, ເອກະພາບ, ດ້ວຍການໃຊ້ໃບປົວບັດສົນ ເຫອື່ນໆ ແຈກຢາຍໄປທົ່ວທຸກແຫ່ງຫົນ ຄັດຄ້ານການກະທຳອັນໂຫດຮ້າຍຂອງສັດຕູ ປຸກລະ

ດົນຄວາມຄຽດແຄ້ນ ໃນຖ້ຳແຖວພະນັກງານ, ທະຫານ, ປະຊາຊົນ ມີຄວາມຕັດສິນໃຈສູງ ກ້າ ເຮັດກ້າຫຳຢ່າງບໍ່ຫວັ່ນກົວ ຕໍ່ການນາບຂູ່ໃດໆ ຂອງສັດຕູ. ທັງໝົດດັ່ງກ່າວນັ້ນ ໄດ້ເປັນການປະ ກອບສ່ວນເຂົ້າກຳລັງແຮງຂອງທົ່ວປະເທດ ແລະ ກຳລັງແຮງຂອງການປະຕິວັດ ປົດປ່ອຍຊາດ ອິນດູຈີນ ລາວ - ຫວຽດນາມ - ກຳປູເຈຍ. ໂດຍສະເພາະ ເຂົ້າໃນບັ້ນລົບ ດຽນບຽນຟູ ໃນວັນທີ 7 ພຶດສະພາ ປີ1954 ເຊິ່ງເປັນບັ້ນລົບສຸດທ້າຍຕັດສິນໄຊຊະນະ ໃນການຕໍ່ສູ້ຕ້ານການຮຸກຮານ ຂອງພວກລ່າເມືອງຂຶ້ນຝຣັ່ງ, ບັງຄັບໃຫ້ພວກເຂົາຕ້ອງຍອມເຊັນສັນຍາເຊີແນວ ໃນວັນທີ 21/7/ 1954.

ພາຍຫຼັງການເຈລະຈາບັນຫາເກົາຫຼີ ໄດ້ສິ້ນສຸດລົງ ໃນວັນທີ 7 ພຶດສະພາ ປີ 1954. ຂ່າວ ກ່ຽວກັບໄຊຊະນະຂອງກຳລັງຮັກຊາດຫວຽດນາມ ແລະການປະລາໄຊຄັ້ງປະຫວັດສາດຂອງຈັກ ກະພັດຝຣັ່ງ ຢູ່ດຽນບຽນຟູ ກໍ່ໄດ້ເຂົ້າມາເຖິງທີ່ປະຊຸມ ອັນເຮັດໃຫ້ຝ່າຍສັດຕູ ຕົກເຂົ້າໃນທ່າອັດ ຕະຄັດຈົນຕາແຈ ແລະ ຈຳຕ້ອງຫັນປ່ຽນຈາກທ່າທີແຂງກະດ້າງ ມາຍິນຍອມຄົ້ນຄວ້າແກ້ໄຂບັນ ຫາອິນດູຈີນ. ວັນທີ 8 ພຶດສະພາ ປີ 1954. ກອງປະຊຸມຄົ້ນຄວ້າບັນຫາອິນດູຈີນ ໄດ້ໄຂຂຶ້ນ ໂດຍມີຜູ້ຕາງໜ້າ ຂອງລັດຖະບານຈາກປະເທດຕ່າງໆ ເຂົ້າຮ່ວມຄື: ສາທາລະນະລັດ ປະຊາທິ ປະໄຕຫວຽດນາມ, ຝຣັ່ງ, ຣາຊະອານາຈັກລາວ, ກຳປູເຈຍ, ຫວຽດນາມໃຕ້, ສະຫະລັດອາເມລິ ກາ, ສາທາລະນະລັດ ປະຊາຊົນຈີນ, ບະລິເຕັນໃຫຍ່ (Great Britain) ແລະ ສະຫະພາບ ສາ ທາລະນະລັດ ສັງຄົມນິຍົມໂຊວຽດ.




ໜາກແຕກທີ່ຊ່ຽວຊານຫວຽດນາມນຳມາຫຼໍ່ຂຶ້ນໃນໄລຍະ ປີ 1951-1953




ຫ້ຽງຫ່າວໃສ່ສັດຕູ ໃນໄລຍະປີ 1952-1954

ຄະນະຜູ້ແທນຂອງຣາຊະອານາຈັກລາວແມ່ນ ຜຸຍ ຊະນະນິກອນ ລັດຖະມົນຕີກະຊວງ ການຕ່າງປະເທດເປັນຫົວໜ້າ, ທ່ານ ກຸວໍລະວົງ ເປັນຮອງຫົວໜ້າເອກອັກຄະຣາຊະທູດລາວປະ ຈຳ ວໍຊິງຕັນ ແລະ ປາຣີ ເປັນຄະນະ ແລະ ມີສາມະຊິກສະພາຣາສະດອນ ອີກ 8 ຄົນ ເປັນຜູ້ສັງ ເກດການ. ທ່ານ ຟາມວັນດົງ ຫົວໜ້າຄະນະຜູ້ແທນຫວຽດນາມ ໄດ້ສະເໜີໃຫ້ ກອງປະຊຸມ ເຊື້ອ ເຊີນເອົາຝ່າຍທີ່ກ່ຽວຂ້ອງກັບສົງຄາມ ອິນດູຈີນ ໂດຍສະເພາະ ແມ່ນຜູ້ແທນກຳລັງຮັກຊາດລາວ ແລະ ຂອງກຳປູເຈຍ ຕໍ່ຕ້ານເຂົ້າຮ່ວມໃນໂຕະເຈລະຈາ ເພື່ອຄົ້ນຄວ້າບັນຫາ ການຢຸດຍິງ ແຕ່ ຜຸຍ ຊະນະນິກອນ ໄດ້ຄັດຄ້ານຢ່າງຮຸນແຮງ ແລະ ປະຕິເສດ ລັດຖະບານລາວ ຕໍ່ຕ້ານຢ່າງໄຮ້ ເຫດຜົນອັນເຮັດໃຫ້ ຄະນະຜູ້ແທນຂອງລັດຖະບານລາວ ແລະ ກຳປູເຈຍ ຕໍ່ຕ້ານບໍ່ສາມາດເຂົ້າ ຮ່ວມໂດຍກົງຢູ່ໂຕະປະຊຸມ. ຄະນະຜູ້ແທນ ຫວຽດນາມ ໄດ້ຕໍ່ສູ້ ແລະ ປ້ອງກັນສິດຜົນປະໂຫຍດ ຂອງການປະຕິວັດລາວ ແລະ ກຳປູເຈຍ ຢ່າງສຸດຂີດບົນພື້ນຖານຄວາມສາມັກຄີຮ່ວມຮົບ ລະ ຫວ່າງ 3 ປະເທດ ອ້າຍນ້ອງ.





ປືນແກັບ, ປືນເພີ້ງ ແລະ ໜ້າໄມ້ ທີ່ໃຊ້ຕ້ານຝຣັ່ງ



ຂຸມຂວາກ ແລະ ຫ່າວ ທີ່ພະນັກງານ ແລະ ປະຊາຊົນເຂດລ້ອງແມດສ້າງຂຶ້ນໃສ່ສັດຕູ ໃນປີ 1952 - 1954

ກອງປະຊຸມ ໄດ້ດຳເນີນໄປເປັນເວລາສອງເດືອນກວ່າ (ວັນທີ 8 ພຶດສະພາ ຮອດ 21 ກໍລະກົດ ປີ 1954). ເນື້ອໃນຂອງສັນຍາເຊີແນວ ປີ 1954 ກ່ຽວກັບອິນດູຈີນ ແມ່ນພວກລ່າເມືອງຂຶ້ນຝຣັ່ງຍອມຜ່າຍແພ້ສົງຄາມ. ຍອມມອບເອກະລາດຄືນໃຫ້ແກ່ສາມປະເທດລາວ - ຫວຽດນາມ ແລະ ກຳປູເຈຍ.

7. ສະພາບການຂຶ້ນເຕົ້າໂຮມສອງແຂວງ.

ສັນຍາຢຸດຕິສົງຄາມຕ້ານພວກລ່າເມືອງຂຶ້ນຝຣັ່ງຢູ່ອິນດູຈີນ ແລະ ປະເທດລາວໄດ້ຖືກຮັບຮອງເອົາ ໃນວັນທີ 21 ກໍລະກົດປີ 1954 ຢູ່ເຊີແນວ, ລັດຖະບານຝຣັ່ງ ໄດ້ໃຫ້ຄຳສັນຍາຢຸດຍິງໃນທົ່ວອິນດູຈີນ, ຍອມຖອນກອງທະຫານອອກຈາກທີ່ຕັ້ງຕ່າງໆ ໃນອິນດູຈີນ ຕາມກຳນົດເວ

ລາທີ່ໄດ້ລະບຸໃນສັນຍາ ແລະ ຝຣັ່ງຈະຕ້ອງເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນ ອັນຄົບຖ້ວນຂອງ 3 ຊາດລາວ, ຫວຽດນາມ ແລະ ກຳປູເຈຍ. ໃນສັນຍາຍັງໄດ້ບົ່ງແຈ້ງ ແລະ ຮັບ ຮູ້ປະເທດລາວ ມີກຳລັງການເມືອງຕໍ່ສູ້ ເພື່ອເອກະລາດຖືກກົດໝາຍ, ມີກອງທະຫານ, ມີເຂດ ເຕົ້າໂຮມຂອງຕົນຄື: ແຂວງ ຫົວພັນ ແລະ ຜົ້ງສາລີ. ເພື່ອເຮັດໃຫ້ສັນຍາມີຜົນສັກສິດ ແລະ ເພື່ອ ເຮັດໃຫ້ປະເທດລາວ ເປັນເອກະພາບນັ້ນ, ສັນຍາໄດ້ກຳນົດວ່າ: ເຈົ້າໜ້າທີ່ສອງຝ່າຍ (ຝ່າຍປະ ເທດລາວ ແລະ ຝ່າຍລັດຖະບານຣາຊະອານາຈັກລາວ) ຈະຕ້ອງດຳເນີນການເຈລະຈາກັນເພື່ອ ຊອກຫາວິທີທາງແກ້ໄຂ ທາງການເມືອງ ບົນພື້ນຖານຮັບປະກັນສິດເສລີພາບ, ປະຊາທິປະໄຕ ໃຫ້ແກ່ປະຊາຊົນ, ກ້າວໄປເຖິງເຮັດໃຫ້ປະເທດລາວ ເປັນເອກະພາບດ້ວຍການເລືອກຕັ້ງທົ່ວໄປ ຢ່າງເສລີ, ມາຮອດເດືອນ ສິງຫາ ປີ 1954 ບັນດາກົມກອງອາສາສະໝັກຫວຽດນາມ ແລະ ບັນ ດາກຳລັງທະຫານສິ່ງນອກລວມທັງຝຣັ່ງ ແມ່ນໄດ້ທະຍອຍກັນອອກຈາກປະເທດລາວ ໃນກຳນົດ ເວລາ 120 ວັນ. ນັບແຕ່ມື້ສັນຍາ ມີຜົນບັງຄັບໃຊ້ເປັນຕົ້ນໄປ. ສຳລັບກຳລັງຝ່າຍ ປະເທດ ລາວ (ແນວລາວອິດສະຫລະ) ຢູ່ບັນດາຮາກຖານການປະຕິວັດ ໃນທົ່ວປະເທດ ແມ່ນໄດ້ຂຶ້ນໄປເຕົ້າ ໂຮມຢູ່ 2 ແຂວງ ຕາມຂໍ້ກຳນົດຂອງສັນຍາ ແລະ ອະນຸສັນຍາ.

ປະຕິບັດຕາມຄຳສັ່ງຂອງສູນກາງພັກ, ແນວລາວອິດສະຫຼະ, ບັນດາກຳລັງທີ່ຮັກຊາດ, ກຳ ລັງປະກອບອາວຸດ ຂອງຝ່າຍປະເທດລາວທົ່ວປະເທດ ກໍ່ໄດ້ພ້ອມກັນຂຶ້ນເມື່ອເຕົ້າໂຮມຢູ່ 2 ແຂວງ ດັ່ງກ່າວ ສ່ວນຢູ່ ນະຄອນຫຼວງວຽງຈັນ ເວລານັ້ນ ຂະບວນການຂຶ້ນໄປເຕົ້າໂຮມ 2 ແຂວງ ແມ່ນໃຫຍ່ ແລະ ຫລາຍກວ່າທຸກໆແຂວງ ມີເຖິງ 700 ກວ່າສະຫາຍ, ສະເພາະຢູ່ເຂດທີ່ໝັ້ນ ລ້ອງຕອນ, ເມືອງ ເຟືອງ, ເມືອງ ແມດ ແລະ ນາເຫລືອງ, ນາເຄືອ ແມ່ນມີຈຳນວນຫລາຍກວ່າ ເຂດອື່ນໆ ຈຳນວນທີ່ຍັງຢູ່ທ້ອງຖິ່ນສ່ວນຫລາຍແມ່ນແມ່ຍິງ, ເດັກນ້ອຍ ແລະ ຜູ້ເຖົ້າ. ດັ່ງນັ້ນ, ພາລະກິດອັນໜັກໜ່ວງຂອງນາຍບ້ານ ຫລື ຫົວໜ້າອົງການຈັດຕັ້ງຕ່າງໆ ພາຍໃນແຕ່ລະບ້ານ ຂອງເຂດທີ່ໝັ້ນຍາມນັ້ນ ຕ້ອງໄດ້ແບກຫາບວຽກງານ ເປັນຕົ້ນແມ່ນ ການສຶກສາອົບຮົມການ ເມືອງ, ແນວຄິດຕໍ່ຄອບຄົວຂອງພະນັກງານ, ທະຫານໃຫ້ອິດທົນ, ທຸ່ນທ່ຽງ ແລະ ເຮັດວຽກນຳ ພາການຜະລິດ ແກ້ໄຂຊີວິດການເປັນຢູ່ ຂອງແຕ່ລະຄອບຄົວ ດ້ວຍການຈັດຕັ້ງແລກປ່ຽນ ແຮງ ງານເຊິ່ງກັນ ແລະ ກັນ, ເບິ່ງແຍງກັນໃນຍາມເຈັບເປັນ ແລະ ອື່ນໆ ການຄາດໄຮ່ໄຖນາ ເວລາ ນັ້ນ, ສ່ວນໃຫຍ່ແມ່ນແມ່ຍິງ ເປັນຜູ້ເຮັດແທນຜູ້ຊາຍ, ສ່ວນພະນັກງານຈຳນວນໜຶ່ງ ທີ່ຍັງຢູ່ກັບ ພື້ນຖານ ແມ່ນສືບຕໍ່ສຶກສາອົບຮົມນຳພາຮາກຖານ ການປະຕິວັດບໍ່ໃຫ້ຖືກທຳລາຍ, ອອກແຮງ ປຸກ ລະດົມທຸກຊັ້ນຄົນໃຫ້ ພ້ອມກັນຈັດຕັ້ງ ແລະ ສະໜັບສະໜູນ ການປະຕິບັດສັນຍາເຊີແນວ ປີ 1954 ຢ່າງແຂງແຮງ.

ສະຫຼຸບລວມແລ້ວ : ນັບແຕ່ປີ 1893 ຫາ1954 ນະຄອນຫຼວງວຽງຈັນ ກໍ່ຄືຊາດລາວເຮົາ ແມ່ນໄດ້ຕົກຢູ່ໃນແອກຄອບຄອງຂອງພວກລ່າເມືອງຂຶ້ນແບບເກົ່າຈັກກະພັດຝຣັ່ງ. ຕະຫຼອດໄລ ຍະທີ່ເປັນຫົວເມືອງຂຶ້ນນັ້ນ ພວກເຂົາໄດ້ດຳເນີນນະໂຍບາຍ ກົດຂີ່ຂູດຮີດປະຊາຊົນຢ່າງໜັກ ໜ່ວງ ແລະ ທຳການປາບປາມພົນລະເມືອງຜູ້ຮັກຊາດຢ່າງໂຫດຮ້າຍປ່າເຖື່ອນ ເຮັດໃຫ້ຊາວນະ ຄອນຫລວງວຽງຈັນກໍ່ຄືປະຊາຊົນລາວໃນທົ່ວປະເທດ ໄດ້ຮັບຄວາມເຈັບແຄ້ນແໜ້ນໃຈ, ທົນທຸກ ທໍລະມານ ຍ້ອນເປັນຂ້ອຍຂ້າມ້າຕ່າງຂອງຊາດອື່ນ. ແຕ່ຍ້ອນແສງສະຫວ່າງຂອງການປະຕິວັດ ໂດຍພາຍໃຕ້ການນຳພາຂອງຄະນະພັກຄອມມູນິດອິນດູຈີນ. ໂດຍສະເພາະຄະນະພັກນະຄອນ ຫລວງວຽງຈັນ ບວກກັບຈິດໃຈຮັກເຊື້ອແພງຊາດ ແລະ ຈິດໃຈຄຽດແຄ້ນສັດຕູໄດ້ ເຮັດໃຫ້ຊາວ ນະຄອນຫລວງວຽງຈັນ ພ້ອມກັບປະຊາຊົນລາວໃນທົ່ວປະເທດ ລຸກຂຶ້ນຕໍ່ສູ້ຕ້ານກັບພວກລ່າ ເມືອງຂຶ້ນແບບເກົ່າ ຈັກກະພັດຝຣັ່ງຢ່າງເປັນຂະບວນກວ້າງຂວາງ ແລະ ຟົດເດືອດ. ມີພະນັກ ງານ, ນັກຮົບ ແລະ ປະຊາຊົນຊາວ ນະຄອນຫລວງວຽງຈັນ ຈຳນວນບໍ່ໜ້ອຍ ໄດ້ຍອມເສຍສະ ຫລະອຸທິດຊີວິດ, ເລືອດເນື້ອ, ເຫື່ອໄຄ ຂອງຕົນເຂົ້າໃນພາລະກິດປະຕິວັດ ຕໍ່ສູ້ກູ້ຊາດຕ້ານກັບ ລັດທິລ່າເມືອງຂຶ້ນແບບເກົ່າ ຂອງຈັກກະພັດຝຣັ່ງ. ສ້າງວິລະກຳອັນລ້ຳເລີດ ກາຍເປັນນັກຮົບວິ ລະຊົນ, ນັກຮົບແຂ່ງຂັນຜູ້ດີເດັ່ນຂອງຊາດ, ຂອງນະຄອນຫລວງວຽງຈັນ. ສາມາດສ້າງຜົນງານ ປະກອບສ່ວນອັນໃຫຍ່ຫລວງ, ລ້ຳຄ່າເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ ເພື່ອຄວາມເປັນເອກະລາດ ຂອງຊາດ ກໍ່ຄືໄຊຊະນະລວມຂອງ ການປະຕິວັດລາວ ຢ່າງສົມກຽດ.

ພາກທີ່ ສີ່

ຊາວນະຄອນຫລວງວຽງຈັນ ພ້ອມກັບ ປະຊາຊົນລາວ ທົ່ວປະເທດ ຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກກະພັດອາເມລິກາ ແລະ ລັດຖະບານ ຫຸ່ນຂາຍຊາດ ແຕ່ປີ 1954 - 1975.

I. ສະພາບການເຂົ້າມາແຊກແຊງຮຸກຮານລາວ ແລະ ນະຄອນຫລວງວຽງຈັນ ຂອງຈັກກະພັດອາເມລິກາ.


ພາຍຫລັງສົງຄາມໂລກ ຄັ້ງທີ II ຍຸດຕິລົງ. ລະບົບສັງຄົມນິຍົມໄດ້ມີການປັບປຸງເຂັ້ມແຂງ ໃນຫລາຍດ້ານ, ອັນໄດ້ສ້າງເງື່ອນໄຂອັນສະດວກ ໃຫ້ຂະບວນການປະຕິວັດ ໂລກລະເບີດຂຶ້ນ ຢ່າງແຂງແຮງ. ສະຫະພາບໂຊຫວຽດ ສຳເລັດແຜນການຫ້າປີ ຄັ້ງທີ V ລົ່ນຄາດໝາຍ ມາເຖິງປີ 1953 ສະຫະພາບໂຊຫວຽດ ໄດ້ເລີ້ມເຂົ້າສູ່ທ່າກ້ຳເກົ່ງ ທາງດ້ານກຳລັງກັບສະຫະລັດອາເມລິກາ. ບັນດາປະເທດສັງຄົມນິຍົມ ໄດ້ກາຍເປັນລະບົບໜຶ່ງທີ່ເຂັ້ມແຂງ, ການຟື້ນຟູ ແລະ ການພັດທະນາເສດຖະກິດ - ສັງຄົມ ແລະ ການກໍ່ສ້າງພື້ນຖານວັດຖຸເຕັກນິກ ຂອງສັງຄົມຢູ່ໃນທ່າກ້າວຂຶ້ນ.

ພາຍຫລັງ ຈັກກະພັດຝຣັ່ງ ປະລາໄຊຢ່າງໜັກ ໃນສົງຄາມ ຢູ່ບັນດາປະເທດໃນອິນດູຈີນ. ລັດທິລ່າເມືອງຂຶ້ນແບບເກົ່າ ກໍຄືລັດທິລ່າເມືອງຂຶ້ນແບບໃໝ່ ໄດ້ຖືກກະແສຟອງ ປະຕິວັດປົດປ່ອຍຊາດຢູ່ທະວີບອາຊີ, ອາຟຣິກາ ແລະ ອາເມລິກາລາຕິນ ບຸກໂຈມຕີຢ່າງແຂງແຮງ. ທ່າອ່ຽງສັນຕິພາບ, ເປັນກາງໃນບັນດາປະເທດຊາດນິຍົມ ທີ່ຫາກໍໄດ້ຮັບການປົດປ່ອຍ ອອກຈາກແອກເມືອງຂຶ້ນນັ້ນ ພວມປະກົດຕົວຂຶ້ນ ແລະ ນັບມື້ນັບກາຍເປັນກະແສຟອງປະຕິວັດ ບຸກໂຈມຕີເຂົ້າໃສ່ລັດທິຈັກກະພັດນິຍົມ.

ຂະບວນການຕໍ່ສູ້ຕ້ານການກົດຂີ່ຂູດຮີດ, ທວງເອົາສິດທຳລົງຊີວິດ, ສິດປະຊາທິປະໄຕ ຂອງກຳມະກອນ ແລະ ປະຊາຊົນ ຜູ້ອອກແຮງງານ ຢູ່ໃນບັດດາປະເທດທຶນນິຍົມ ໄດ້ຂະຫຍາຍຕົວຢ່າງຟົດເດືອດ.

ຂະບວນການຕໍ່ສູ້ ເພື່ອສັນຕິພາບ, ຕ້ານສົງຄາມຂອງ ປະຊາຊົນ ຢູ່ໃນໂລກ, ນັບທັ້ງຂະບວນການຂອງປະຊາຊົນຝຣັ່ງ ແລະ ປະຊາຊົນອາເມລິກາ ກໍໄດ້ເກີດຂຶ້ນຢ່າງຕໍ່ເນື່ອງ ເວົ້າລວມ ລັດທິຈັກກະພັດ ໄດ້ຕົກຢູ່ໃນທ່າກະວົນກະວາຍ, ພາຍໃນພວກເຂົາຍິ່ງຂັດແຍ້ງກັນຮ້າຍແຮງຂຶ້ນກວ່າເກົ່າ.

ເພື່ອແກ້ໄຂສະຖານະການດັ່ງກ່າວ, ພວກຈັກກະພັດ ເປັນຕົ້ນແມ່ນ ຈັກກະພັດອາເມລິກາ ທີ່ມີກຳລັງແຮງ ທາງດ້ານການທະຫານ ທັງເປັນຫົວໂປ່ຂອງຄ້າຍຈັກກະພັດ, ເຖິງວ່າຖືກປະລາໄຊໃນສົງຄາມ ເກົາຫລີ ປີ 1953 ກໍຕາມ. ແຕ່ພວກເຂົາກໍຍັງໃຊ້ນະໂຍບາຍປິດລ້ອມເສດຖະກິດ ຕໍ່ບັນດາປະເທດສັງຄົມນິຍົມ. ດຳເນີນສົງຄາມເຢັນ, ປະຕິບັດກົນອຸບາຍຫັນປ່ຽນໂດຍສັນຕິ, ເອົາລັດທິລ່າເມືອງຂຶ້ນແບບໃໝ່ປ່ຽນແທນລັດທິລ່າເມືອງຂຶ້ນແບບເກົ່າ, ປາບປາມຂະບວນການປົດປ່ອຍຊາດ, ຕ້ານຂະບວນການຕໍ່ສູ້ ເພື່ອປົກປັກຮັກສາ ສັນຕິພາບ ຂອງປະຊາຊົນ ໃນໂລກ ແລະ ປະຊາຊົນລາວເຮົາ.



ນາຍທະຫານ ແລະ ທີ່ປຶກສາອາເມລິກາເລີ່ມເຂົ້າ
ແຊກແຊງລາວປີ 1955

ຢູ່ອິນດູຈີນ, ພາຍຫລັງທີ່ພວກລ່າເມືອງຂຶ້ນຝຣັ່ງປະລາໄຊ,ຈັກກະພັດອາເມລິກາ ໄດ້ຊຸນຊ້ຽວກຽມປັດເຂ່ຍຝຣັ່ງ ເພື່ອໂດດເຂົ້າມາແທນ ແລະ ມີກົນອຸບາຍປະຕິບັດລັດທິລ່າເມືອງຂຶ້ນ ແບບໃໝ່ຢູ່ພາກພື້ນນີ້. ຢູ່ຫວຽດນາມ, ພາກເໜືອໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ໄລຍະໃໝ່ຂອງການປະຕິວັດ ສັງຄົມນິຍົມ ສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຕໍ່ສູ້ປົດປ່ອຍພາກໃຕ້ ແລະ ເຮັດໃຫ້ປະເທດຊາດເປັນເອກະພາບ. ຢູ່ປະເທດລາວເຮົາໄດ້ມີເຂດເຕົ້າໂຮມຢູ່ ສອງແຂວງ (ແຂວງ ຫົວພັນ ແລະ ຜົ້ງສາລີ) ແລະມີພື້ນຖານການປະຕິວັດຢູ່ໃນ10 ແຂວງ ແລະ ໃນທົ່ວປະເທດ.

ຈັກກະພັດອາເມລິກາ ໄດ້ເຂົ້າມາແຊກແຊງຮຸກຮານ ລາວແທນຈັກກະພັດຝຣັ່ງ, ມີກົນອຸບາຍມ້າງເພທຳລາຍສັນຍາເຊີ ແນວ ປີ 1954, ກ່ຽວກັບອິນດູຈີນ ແລະ ລາວເຮົາ. ພວກເຂົາມີແຜນຍຸດທະສາດ ແລະ ກົນອຸບາຍ ພື້ນຖານ, ຫວັງຈະເຮັດໃຫ້ປະເທດລາວເຮົາກາຍເປັນເມືອງຂຶ້ນແບບໃໝ່ ແລະ ເປັນຖານທັບຂອງພວກເຂົາ. ເພື່ອແນໃສ່ດັບສູນກຳລັງປະຕິວັດທີ່ຍັງອ່ອນນ້ອຍ, ໃຊ້ປະເທດລາວເຮົາເປັນແປ້ນຢັນດຳເນີນສົງຄາມປິດລ້ອມ ແລະ ບຸກໂຈມຕີບັນດາປະເທດສັງຄົມນິຍົມ ໂດຍກົງແມ່ນປະເທດສັງຄົມນິຍົມຫວຽດນາມ.

ຢູ່ນະຄອນຫລວງວຽງຈັນ ຫລັງຈາກ ຈັກກະພັດອາເມລິກາ ແລະ ລູກແຫລ່ງຕົ້ນມືຂອງພວກເຂົາ ໄດ້ໂຄ່ນລົ້ມລັດຖະບານ ເຈົ້າ ສຸວັນນະພູມມາ ແລ້ວຈັດຕັ້ງລັດຖະບານທີ່ນິຍົມອາເມລິກາ ຂຶ້ນ ເຮັດໃຫ້ ນະຄອນຫລວງວຽງຈັນ ຕ້ອງກາຍເປັນສູນກາງປະຕິບັດລັດທິລ່າເມືອງຂຶ້ນແບບ

ໃໝ່ຂອງຈັກກະພັດອາເມລິກາ ແລະ ເປັນສູນບັນຊາການໂຈມຕີບຽດຢຶດເຂົ້າສອງແຂວງເຕົ້າໂຮມກຳລັງຝ່າຍປະເທດລາວ. ພ້ອມທັງດຳເນີນການຂອກຄົ້ນ, ກວາດລ້າງ, ເຊັ່ນຂ້າ, ປາບປາມ ແລະ ຈັບກຸມຄຸມຂັງພະນັກງານຕໍ່ຕ້ານເກົ່າ ແລະ ປະຊາຊົນຜູ້ຮັກຊາດຢູ່ເຂດທີ່ໝັ້ນຕ່າງໆ ເປັນຕົ້ນ: ຢູ່ເມືອງ ເຟືອງ, ລ້ອງແມດ, ກາສີ, ວັງວຽງ, ບ້ານ ນາພອກ, ບ້ານ ດົງບັງ, ບ້ານ ທ່າດອກຄຳ, ບ້ານ ທ່າດີນແດງ, ບ້ານ ເວີນແທ່ນ, ບ້ານ ໜອງບຶກ, ບ້ານ ຫີວຊ້າງ, ບ້ານ ນາຊອນ - ຫີວຂີວ, ບ້ານ ນາຍາງ, ບ້ານ ນາຫອຍ, ບ້ານ ເພຍລາດ ແລະ ບ່ອນອື່ນໆ. ພ້ອມນັ້ນ ພວກເຂົາໄດ້ນຳເອົາວັດທະນະທຳ - ສັງຄົມ ເປື່ອຍເຍື່ອຍມາເບື່ອເມົາປະຊາຊົນ, ຊາວໜຸ່ມລາວໃຫ້ຫັນໄປນິຍົມ ຕາມລັດທິລ່າເມືອງຂຶ້ນແບບໃໝ່ຂອງອາເມລິກ.

ໄລຍະນັ້ນ ຂະບວນການປະຕິວັດຢູ່ ນະຄອນຫລວງວຽງຈັນ ແມ່ນຖືກປິດລ້ອມ ແລະ ຂົ່ມຂູ່ ຈາກກຳລັງຂອງສັດຕູຢ່າງໜັກໜ່ວງ ແລະ ມີຄວາມອັນຕະລາຍຫລາຍທີ່ສຸດ ເພາະວ່າຢູ່ທາງທິດ ຕາເວັນອອກ ສ່ຽງເໜືອ ມີກຳລັງທະຫານ ພາກ 2 ຂອງວາງປາວ, ທາງທິດ ຕາເວັນຕົກ ຕິດກັບຊາຍແດນປະເທດໄທ, ທາງທິດເໜືອ ຕິດກັບແຂວງ ຫລວງພະບາງ ຊຶ່ງເປັນສຳນັກງານພະຣາຊະວັງ ແລະ ຢູ່ກະໂຕໃຈກາງ ນະຄອນຫລວງວຽງຈັນເອງ ກໍມີກຳລັງທະຫານພາກ 5 ຊຶ່ງເປັນພາກທີໃຫຍ່ ແລະ ມີກຳລັງພົນຫລາຍກ່ວາໝູ່ ເຮັດໃຫ້ຂະບວນການປະຕິວັດຢູ່ ນະຄອນຫລວງວຽງຈັນ ຍາມນັ້ນ ຕົກຢູ່ໃນສະພາວະຫຍຸ້ງຍາກ ພວກເຂົາຫວັງດັບມອດກຳລັງປະຕິວັດ ຂອງແຂວງ ນະຄອນຫລວງວຽງຈັນ ໃຫ້ສຳເລັດແຕ່ພວມຍັງອ່ອນນ້ອຍ.

II. ການປະຕິບັດກົນອຸບາຍ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກກະພັດອາເມລິກາໃນລາວ ແລະ ນະຄອນຫລວງວຽງຈັນ.

ເມື່ອຈັກກະພັດອາເມລິກາ ໄດ້ເຂົ້າມາຄອບຄອງລາວແລ້ວ. ເພື່ອປະຕິບັດກົນອຸບາຍອັນມືດມົນ ດັ່ງກ່າວ ພວກເຂົາໄດ້ຈັດຕັ້ງອຳນາດການປົກຄອງຫຸ່ນ ໂດຍແມ່ນຄົນທີ່ນິຍົມອາເມລິກາ, ສ້າງພັກການເມືອງປະຕິການຂຶ້ນຫລາຍພັກ ເຊິ່ງພັກເຫລົ່ານັ້ນແຂ່ງຂັນກັນຂາຍຊາດ, ຂາຍປະຊາຊົນ ເປັນລູກມືຜູ້ບໍລິສຸດຂອງຈັກກະພັດອາເມລິກາ, ພວກເຂົາໄດ້ສ້າງກອງທະຫານຮັບຈ້າງຂຶ້ນຫລາຍກອງພັນ ໃຊ້ກອງທະຫານເຫລົ່ານັ້ນ ບຸກໂຈມຕີບຽດຢຶດເຂົ້າສອງແຂວງເຕົ້າໂຮມ ຫີວພັນ ແລະ ຜົ້ງສາລີ ຫວັງດັບສູນກຳລັງປະຕິວັດໃຫ້ຕາຍຄາອູ່. ພ້ອມກັນນັ້ນ ກໍ່ເປີດບັ້ນກວາດລ້າງ ປາບປາມ ເພື່ອດັບມອດຂະບວນການ ຕໍ່ສູ້ປະຕິວັດຂອງປະຊາຊົນຢູ່ 10 ແຂວງ ທີ່ຢູ່ໃນເຂດກວດກາຊົ່ວຄາວຂອງພວກເຂົາຢ່າງປ່າເຖື່ອນ. ດ້ວຍເຫດນັ້ນຈັກກະພັດອາເມລິກາ ຈຶ່ງກາຍເປັນສັດຕູໂດຍກົງ ຂອງປະຊາຊົນລາວ ໃນທົ່ວປະເທດ ກໍຄື ປະຊາຊົນນະຄອນຫລວງວຽງຈັນ.

ທາງດ້ານເສດຖະກິດ - ການເມືອງ.

ພວກເຂົາ ໄດ້ຄວບຄຸມລາຍຈ່າຍຂອງລັດຖະບານ ແລະ ຂອງຝ່າຍທະຫານ. ດັ່ງນັ້ນ ອາເມລິກາ ຈຶ່ງຖອກເທເງິນໂດລາ ຜູກມັດຄວບຄຸມດ້ານເສດຖະກິດ ອັນເປັນເງື່ອນໄຂ ເພື່ອຜູກມັດດ້ານການເມືອງ ແລະ ການທະຫານ ໄປພ້ອມໆກັນ. ການຊ່ວຍເຫລືອຂອງອາເມລິການັ້ນ ໄດ້ໃຊ້ຈ່າຍເຂົ້າໃນການທະຫານ ເຖິງ 4/5. ໃນທີ່ສຸດ ອາເມລິກາ ກໍ່ສາມາດຄວບຄຸມຜູກມັດ ແລະ ບັນຊາລັດຖະບານ ລາຊະອານາຈັກໃນທຸກດ້ານ, ພວກເຈົ້ານາຍຊັ້ນສູງ ແຍ້ງຊີ້ງກັນສ້າງຄວາມລຳລວຍ ດ້ວຍເງິນຊ່ວຍເຫລືອຂອງອາເມລິກາ. ເພື່ອໃຊ້ຈ່າຍຟຸມເຟືອຍ ແລະ ສ້າງຄວາມສຸກໃຫ້ແກ່ສ່ວນຕົວ ຢູ່ເທິງຄວາມທຸກຍາກຂອງປະຊາຊົນລາວ. ການສໍ້ລາດບັງຫລວງ ໄດ້ເກີດຂຶ້ນ ແລະ ຂະຫຍາຍຕົວຢ່າງວ່ອງໄວ. ພື້ນຖານເສດຖະກິດຂອງຊາດຖືກປັ່ນປ່ວນ, ການຜະລິດກະສິກຳ, ຫັດຖະກຳຫລຸດນ້ອຍຖອຍລົງ, ຄ່າພາສີຕ່າງໆ ຊຳພັດສູງຂຶ້ນຊັກໄຊ້, ຄ່າຄອງຊີບຖີບຂຶ້ນສູງຕາມລຳດັບ, ຊີວິດການເປັນຢູ່ຂອງປະຊາຊົນ ຜູ້ອອກແຮງງານ ທຸກຍາກລຳບາກ, ບໍ່ມີວຽກເຮັດງານທຳ, ບໍ່ໄດ້ຮັບການສຶກສາ, ດູແລສຸຂະພາບ ແລະ ບໍ່ມີສິດເສລີພາບ ປະຊາທິປະໄຕ ອັນພື້ນຖານຂອງ ພົນລະເມືອງລາວ.

ທາງດ້ານວັດທະນະທຳ - ສັງຄົມ.

ພວກເຂົາໄດ້ອອກແຮງມ້າງເພ ພື້ນຖານສັງຄົມລາວ, ນຳເອົາສັງຄົມ ວັດທະນະທຳ ແບບຂ້ອຍຂ້າ ເສື່ອມຊາມ ເຂົ້າມາໃນລາວ. ພວກເຂົາ ໄດ້ຂະຫຍາຍໂຮງການພະນັນ, ໂຮງເຕັ້ນລຳ, ໂຮງໂສເພນີ, ໂຮງສູບຝິ່ນ, ເຮໂລອິນ, ຊຸກຍູ້ສົ່ງເສີມໃຫ້ໄວໜຸ່ມ ຫລິ້ນກິນຟຸມເຟືອຍ, ກິນເຫລົ້າ, ສູບຊາ. ດຶງດູດເອົາໄວໜຸ່ມ ເຂົ້າສູ່ເສັ້ນທາງອັນຫລ້າຫລັງ ຫລີ ເຂົ້າການຈັດຕັ້ງ " ຣິບປ໊ ", " ຈ໊ ໂກະ " ສ້າງຄວາມຊົ່ວຊ້າ ແລະ ກໍກຳທຳເຂັ່ນໃສ່ຕົນເອງ, ລືມປະເທດຊາດ, ລືມເຊື້ອຊາດ, ບໍ່ເຫັນແຈ້ງເຫດໄພແຫ່ງການສູນເສຍບ້ານເມືອງ, ບໍ່ເຫັນໄດ້ໂທດກຳຂອງອາເມລິກາທີ່ມາຮຸກຮານລາວ, ກໍໂທດກຳປາບປາມ, ເຂັ່ນຂ້າປະຊາຊົນ, ອັນຮ້າຍແຮງກ່ວານັ້ນແມ່ນຄົນລາວຈຳນວນໜຶ່ງທີ່ນິຍົມອາເມລິກາ ຍັງກົ້ມຫົວຮັບໃຊ້ໃຫ້ພວກເຂົາໃນທຸກດ້ານອີກ. ພວກເຂົາໄດ້ສວຍໃຊ້ສາສະໜາ ເພື່ອເປັນເຄື່ອງມືເບື່ອເມົາຄົນລາວ ໄດ້ດັດແປງຫລັກທຳມະທີ່ພົ້ນຢູ່ປະເທດໄທ, ແລ້ວສົ່ງເຂົ້າມາລາວ, ເຜີຍແຜ່ອັນເໝາະສົມ ກັບຄວາມຕ້ອງການ ຂອງລັດທິລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາ, ສົ່ງນັກສືບສອດແນມເຂົ້າບວດເພື່ອກຳກົງຈັກສາສະໜາ, ຕ້ານກັບຄຳສອນທີ່ມີລັກສະນະ ປຸກລຸກມ໊ໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກການອອກແຮງງານ, ສ້າງສາພັດທະນາປະເທດຊາດ, ສົ່ງເສີມໃຫ້ເຊື່ອຖືແບບເຜີ້ຝັນ, ງົມງວາຍ, ສະຫວັນວິມານ ທີ່ຝັນຕ່ໍວິທະຍາສາດ. ຕະຫຼອດໄລຍະ 21 ປີ ທີ່ພວກລ່າເມືອງຂຶ້ນແບບໃໝ່ ຈັກກະພັດອາເມລິກາ

ເຂົ້າມາຮຸກຮານລາວ, ພວກເຂົາໄດ້ວາງກົນອຸບາຍ ຄືດັ່ງກ່າວນັ້ນ ມັນໄດ້ເຮັດໃຫ້ປະຊາຊົນຊາວ ນະຄອນຫລວງວຽງຈັນ ຖືກກົດຂີ່ຂູດຮີດ, ເຂັ່ນຂ້າ ແລະ ຖືກປາບປາມຢ່າງໜັກໜ່ວງ.

III. ຊາວນະຄອນຫລວງວຽງຈັນ ຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນ ແບບໃໝ່ ຂອງຈັກກະພັດອາເມລິກາ ແລະ ລັດຖະບານຫຸ່ນຂາຍຊາດ ໃນແຕ່ລະໄລຍະ.

ຫລັງຈາກຕີເອົາຊະນະ ແລະ ປົດແອກລ່າເມືອງຂຶ້ນແບບເກົ່າ ຂອງຝຣັ່ງແລ້ວ ແທນທີ່ຈະ ມີໂອກາດຟື້ນຟູ ສັນຕິພາບ ສ້າງສາປະເທດຊາດ ປ່ຽນແປງຊີວິດການເປັນຢູ່ໃຫ້ດີຂຶ້ນ ຊໍ້າພັດຕ້ອງ ປະເຊີນໜ້າກັບລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາໃນທັນທີໂລດ, ສັດຕູໂຕໃໝ່ນີ້ຊໍ້າ ພັດແມ່ນຈັກກະພັດຜູ້ນຳໜ້າຂອງໂລກທຶນນິຍົມ ທີ່ມີເຫງົ້າພະລັງເສດຖະກິດ ແລະ ການທະ ຫານອັນເຂັ້ມແຂງ ເໜືອກວ່າຝ່າຍປະຕິວັດຕັ້ງຫລາຍໆເທົ່າ ທັງມີກົນອຸບາຍອັນໂຫດຫ້ຽມເລິກ ແລບແນບນຽນ ເຊິ່ງຝ່າຍປະຕິວັດຕ້ອງຕໍ່ສູ້ທັບມ້າງ ແລະ ຕີເອົາຊະນະຢ່າງທັນການດ້ວຍກຳລັງ ແຮງອັນອ່ອນນ້ອຍຂອງຕົນເອງ.

ເພື່ອພ້ອມກັບປະຊາຊົນລາວ ຕີເອົາຊະນະກົນອຸບາຍ ອັນໂຫດຮ້າຍປ່າເຖື່ອນ ຂອງສັດຕູ ດັ່ງກ່າວນັ້ນ ພະນັກງານ ແລະ ປະຊາຊົນຊາວ ນະຄອນຫລວງວຽງຈັນ ຜູ້ຮັກຊາດ ທີ່ຊ້ອນຕົວຢູ່ ພື້ນຖານຂອງແຂວງ ກໍໄດ້ເດັດດ່ຽວຢຶດໝັ້ນຕໍ່ການນຳພາຂອງພັກ ອອກແຮງເສີມຂະຫຍາຍມູນ ເຊື້ອອັນດີງາມ ແລະ ບົດຮຽນອັນປະເສີດ ທີ່ໄດ້ສະສົມມາໃນໄລຍະຕໍ່ສູ້ມີໄຊ ຕ້ານຈັກກະພັດ ຝຣັ່ງ, ສືບຕໍ່ກໍ່ສ້າງຮາກຖານການເມືອງ ກຳລັງປະກອບອາວຸດ ແລະ ປຸກລະດົມນ້ຳໃຈຮັກຊາດ ຄຽດແຄ້ນສັດຕູ ສຸມໃສ່ຕີເອົາຊະນະ ພວກລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ເປັນແຕ່ ລະໄລຍະ, ສ້າງຜົນງານອັນໃຫຍ່ຫລວງ ປະກອບສ່ວນເຂົ້າໃນພາລະກິດປົດປ່ອຍຊາດ ວັນທີ 2 ເດືອນ ທັນວາ ປີ 1975 ຢ່າງສະຫງ່າງາມ.

1. ໄລຍະການຕໍ່ສູ້ປະຕິບັດສັນຍາເຊີແນວ ແຕ່ປີ 1954 - 1958.

- ໄລຍະປັບປຸງ ແລະ ຂະຫຍາຍຮາກຖານການເມືອງ:

ພາຍໃຕ້ການຊີ້ນຳຂອງ ຄະນະພັກ ເຂດວຽງຈັນ, ບັນດາພະນັກງານ, ສະມາຊິກພັກ ນັກ ເຄື່ອນໄຫວປະຕິວັດຈຳນວນໜຶ່ງ ທີ່ຍັງເຄື່ອນໄຫວປົດລັບ ແລະ ບໍ່ທັນໄດ້ຖືກເປີດເຜີຍ ແມ່ນຍັງ ໄດ້ປົດລັບ ສືບຕໍ່ເຄື່ອນໄຫວຊີ້ນຳ - ນຳພາ ປະຊາຊົນ ກໍ່ສ້າງຊີວິດໃໝ່, ທັງປົກປັກຮັກສາຕົວ ເມືອງ ວຽງຈັນ, ທັງຕໍ່ສູ້ຕ້ານກັບບັນດາອິດທິກຳລັງ ນັກສືບສອດແນມ ທີ່ສັດຕູໄດ້ອອກແຮງໂຄ ສະນາໃສ່ຮ້າຍປ້າຍສີກຳລັງປະຕິວັດ, ຫວັງຈະຜັນແຍກລະຫວ່າງ ແນວລາວຮັກຊາດ ກັບບັນ ດາຮາກຖານ ປະຊາຊົນ ໃນຂອບເຂດທົ່ວແຂວງນະຄອນຫລວງວຽງຈັນ, ຕັດຂາດການຕິດຕໍ່

ພິວພັນລະຫວ່າງ ສູນກາງ ແລະ ທ້ອງຖິ່ນ; ຢູ່ນະຄອນຫລວງວຽງຈັນເວລານີ້, ບັນດາຮາກຖານ ປະຕິວັດແມ່ນຍັງ ໄດ້ຮັກສາ ແລະ ສືບຕໍ່ຂະຫຍາຍ ເປັນຕົ້ນ ຢູ່ບໍລິເວນໃຈກາງນະຄອນຫລວງ, ພວກເຮົາໄດ້ຮັກສາ ບັນດາສະມາຊິກພັກ, ພະນັກງານຮາກຖານ ຜູ້ທີ່ເຄີຍໄດ້ເຄື່ອນໄຫວ ແລະ ບໍ່ທັນຖືກເປີດເຜີຍ, ສຳລັບສູນກາງແມ່ນໄດ້ສົ່ງຜູ້ແທນຂອງຕົນເຂົ້າປະສົມ, ມີກຳລັງປ້ອງກັນ ຄວາມສະຫງົບ ຈຳນວນໜຶ່ງເຂົ້າຮ່ວມຢູ່ເຂດນອກ ຄື: ເມືອງເຟືອງ, ລ້ອງສັງ - ລ້ອງຕ້ອນ, ໂພນ ໂຮງ, ກາສີ, ວັງວຽງ, ວຽງຈັນໃຕ້, ວຽງຈັນຕາເວັນອອກ ນອກຈາກຮັກສາທີ່ໝັ້ນແລ້ວ ຍັງໄດ້ປັບ ປຸງບູລະນະຄືນ ດ້ານການຈັດຕັ້ງໃຫ້ແໜ້ນໜາ ປະກອບພະນັກງານຈຳນວນໜຶ່ງ ທີ່ສູນກາງສົ່ງ ມາເພີ່ມ ແລະ ປ່ຽນແທນບັນດາສະຫາຍ ທີ່ຖືກຂຶ້ນເຕົ້າໂຮມຢູ່ສອງແຂວງ, ບັນດາອົງການຈັດຕັ້ງ ປະຕິວັດເຊັ່ນ: ຊາວໜຸ່ມ, ແມ່ຍິງ, ກຳມະກອນ, ສາສະໜາ, ນັກຮຽນ... ກໍລ້ວນແຕ່ໄດ້ຮັບການ ປັບປຸງ, ແນໃສ່ເພື່ອເປັນຫລັກແຫລ່ງນຳພາຂະບວນການຕໍ່ສູ້ ດ້ານການເມືອງຂອງປະຊາຊົນ ລະຫວ່າງຕົວເມືອງກັບຊົນ ນະບົດໃຫ້ຕິດລຽນກັນ.

ການປັບປຸງ ແລະ ຂະຫຍາຍຮາກຖານການເມືອງ, ພະນັກງານ, ສະມາຊິກພັກຈຳນວນ ໜຶ່ງ ທີ່ຍັງເຄື່ອນໄຫວປິດລັບຢູ່ນຳແຕ່ລະຮາກຖານ ກໍໄດ້ອອກແຮງສຸມໃສ່ເຮັດ 2 ວຽກໃຫຍ່ເຊັ່ນ: ສືບຕໍ່ປັບປຸງ ແລະ ຂະຫຍາຍຮາກຖານການເມືອງຢູ່ນະຄອນຫຼວງວຽງຈັນ ແລະ ເຂດອ້ອມຂ້າງ ໃນສະພາບແວດລ້ອມທີ່ ນະຄອນຫລວງວຽງຈັນ ເປັນເຮືອນຮັງໃຫຍ່ຂອງສັດຕູ, ກຳລັງປະຕິ ວັດມີໜ້ອຍ ແຕ່ສັດຕູຊ້ຳພັດອອກແຮງກວາດລ້າງປາບປາມຂະບວນການປະຕິວັດ ຢ່າງຕໍ່ເນື່ອງ. ເມື່ອສະພາບການເປັນຄືແນວນັ້ນ ໜ້າທີ່ອັນຮີບດ່ວນຂອງຄະນະພັກຢູ່ແຕ່ລະເຂດຂອງນະຄອນ ຫລວງວຽງຈັນ ຍາມນັ້ນ ແມ່ນເດັດດ່ຽວປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍຮາກຖານການ ເມືອງໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ໃນການຕໍ່ສູ້ຕີເອົາຊະນະລັດທິລ່າເມືອງຂຶ້ນແບບໃໝ່, ຢູ່ພາຍໃນ ນະຄອນຫລວງວຽງຈັນ ໃນສະເພາະໜ້າ ແລະ ຍາວນານ ຄື:

ຕັ້ງໜ້າປຸກລະດົມນຳພາ ສຶກສາອົບຮົມ ພະນັກງານ, ສະມາຊິກພັກ ຫລັກແຫລ່ງແກ່ນ ສານຢູ່ແຕ່ລະເຂດ ໃຫ້ພ້ອມກັນເດັດດ່ຽວ ປົກປັກຮັກສາເຂດທີ່ໝັ້ນ ພື້ນຖານການປະຕິວັດບໍ່ ໃຫ້ຖືກທຳລາຍມ້ຽງເພ, ປົກປັກຮັກສາການຈັດຕັ້ງພັກ, ພະນັກງານຕະຫລອດຮອດ ປະຊາຊົນ ທີ່ເປັນຫລັກ ແຫລ່ງຢູ່ຮາກຖານໄວ້ໃຫ້ໝັ້ນຄົງ ແລະ ເຂັ້ມແຂງ.

ອອກແຮງປັບປຸງທັດສະນະຄວາມຮັບຮູ້ຍຸດທະວິທີໃໝ່ ໃຫ້ແກ່ພະນັກງານ ແລະ ປະຊາ ຊົນ ເພື່ອຕີເອົາຊະນະກົນອຸບາຍໃໝ່ທີ່ເລິກແລບແນບນຽນ ແລະ ໂຫດຫ້ຽມຂອງລັດທິລ່າເມືອງ ຂຶ້ນແບບໃໝ່ອາເມລິກາ ດ້ວຍການເອົາໃຈໃສ່ໂຄສະນາຊີ້ແຈງ ອະທິບາຍໃຫ້ພະນັກງານ ແລະ

ປະຊາຊົນ ຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງວ່າ: (ກົນອຸບາຍທີ່ເລິກແລບແນບນຽນ) ຂອງສັດຕູ ນັ້ນ ແມ່ນເຂົາຈະໃຊ້ການຕົວະຍົວະຫລອກລວງ ຊີ້ຈ້າງຈອບອອຍ ເພື່ອໃຫ້ພວກເຮົາຫລົງລືມຕົວ ແລ້ວປະລະອຸດົມການປະຕິວັດ, ຄຳວ່າ: (ໂຫດຫ້ຽມ) ນັ້ນແມ່ນ ໄປຄຽງຄູ່ກັບການຕົວະຍົວະ ຫລອກລວງ ແລະ ຊີ້ຈ້າງຈອບອອຍນັ້ນ ພວກເຂົາຈະຕັ້ງໜ້າກວາດລ້າງ, ປາບປາມກຳລັງປະຕິ ວັດຢ່າງຮຸນແຮງ ແລະ ປ່າເຖື່ອນກວ່າເກົ່າ, ພະນັກງານ ແລະ ປະຊາຊົນທຸກຄົນ ຕ້ອງມີຫລັກ ໝັ້ນມົດ - ສັດຕູຈະແຈ້ງເຂັ້ມແຂງທົນທານ ແລະ ກ້າຫານພ້ອມກັນຕີເອົາຊະນະ ກັບທຸກກໍລະນີ ການປະຕິບັດກົນອຸບາຍຂອງສັດຕູ ດັ່ງກ່າວນັ້ນ.

- ດ້ານຮູບການຕໍ່ສູ້ໃນເວລານັ້ນ.


ແມ່ນໄດ້ຫັນມາໃຊ້ ວິທີການຕໍ່ສູ້ທາງການເມືອງ ເປັນຈຸດໜັກສ່ວນການສະກັດ, ຫຼອມຕີ ດ້ວຍກຳລັງປະກອບອາວຸດ ແມ່ນຖືເປັນສຳຄັນ ຕາມການລະໂອກາດເໝາະສົມ, ຈຸດໜັກແມ່ນ ຕໍ່ສູ້ທວງໃຫ້ມີການປະຕິບັດ ສັນຍາເຊີແນວ ປີ1954 ແລະ ເພື່ອປົກປັກຮັກສາ ສອງແຂວງ ເຕົ້າໂຮມ.

- ການຂະຫຍາຍຮາກຖານພັກ:

ໄປພ້ອມໆ ກັບການປົກປັກຮັກສາ ແລະ ປັບປຸງຮາກຖານການເມືອງ ຢູ່ພາຍໃນແຂວງ ນະຄອນຫຼວງວຽງຈັນແລ້ວ ກໍຍັງໄດ້ເອົາໃຈໃສ່ກໍ່ສ້າງ ແລະ ຂະຫຍາຍຮາກຖານ ໃຫ້ນັບມື້ນັບ ກວ້າງຂວາງ ແລະ ເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງ:

ຢູ່ຂັ້ນ ນະຄອນຫລວງວຽງຈັນ ມາຮອດ ເດືອນ ຕຸລາ ປີ 1956 ພາຍຫລັງພັກປະຊາຊົນລາວ ໃນເມື່ອກ່ອນພັກປະຊາຊົນປະ ຕິວັດລາວ ປະຈຸບັນໄດ້ຮັບການສ້າງຕັ້ງຂຶ້ນແລ້ວ ຄະນະພັກແຂວງ ນະຄອນຫລວງວຽງຈັນ ຊຸດທຳອິດກໍໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງ ປະກອບມີ 10 ສະຫາຍຄື:

1. ສະຫາຍ ຈານຕັນ (ພໍ່ຕຽງ) ເປັນເລຂາ
2. ສະຫາຍ ຈັນມີ ດວງບຸດີ ເປັນຮອງເລຂາ
3. ສະຫາຍ ທິດເຄນ (ພໍ່ສະແຫວງ) ເປັນກຳມະການ
4. ສະຫາຍ ທິດກັນຍາ (ພໍ່ກອງສີ) ເປັນກຳມະການ
5. ສະຫາຍ ຈັນດີ ເປັນກຳມະການ
6. ສະຫາຍ ພໍ່ເພັງ ເປັນກຳມະການ
7. ສະຫາຍ ພໍ່ຕອງ ເປັນກຳມະການ



ສະຫາຍ ຈານຕັນ (ພໍ່ຕຽງ)
ເລຂາພັກ ແຂວງນະຄອນ
ຫລວງວຽງຈັນຜູ້ທຳອິດ
ປີ 1956

8. ສະຫາຍ ບຸນມາ (ບຸນມາເຖິກ) ເປັນກຳມະການ
9. ສະຫາຍ ພໍ່ຈຳປີ ເປັນກຳມະການ
10. ສະຫາຍ ພໍ່ຄຳຕັນ ເປັນກຳມະການ

ໜ້າທີ່ຕົ້ນຕໍຂອງຄະນະພັກຊຸດນີ້ແມ່ນ:

ຕັ້ງໜ້າຂະຫຍາຍຮາກຖານ ການເມືອງໃຫ້ກວ້າງຂວາງ ແລະ ເຂັ້ມແຂງ, ຄັດຄ້ານບໍ່ໃຫ້ ສັດຕູເອົາກຳລັງໄປຕີ ສອງແຂວງເຕົ້າໂຮມ ແລະ ຕໍ່ສູ້ທວງໃຫ້ມີການປະຕິບັດ ສັນຍາເຊີແນວ ປີ 1954. ຂົນຂວາຍທະຫານສັດຕູ ໂຕນປະກົມກອງ ອອກໄປສູ່ຖົ່ນແຖວປະຕິວັດ.

ມາຮອດປີ 1957 ແຕ່ລະເມືອງໄດ້ມີຄະນະພັກເມືອງຄົບຖ້ວນ, ໜ່ວຍພັກກໍໄດ້ຂະຫຍາຍ ເພີ່ມຂຶ້ນຈຳນວນສະມາຊິກພັກ ທົ່ວແຂວງເວລານີ້ມີ 1.200 ສະຫາຍ, ໃນນີ້ເປັນສະມາຊິກພັກ ຢູ່ຮາກຖານບ້ານ 950 ສະຫາຍ.

- ການສືບຕໍ່ ຕໍ່ສູ້ໃຫ້ມີການປະຕິບັດສັນຍາເຊີແນວ ປີ 1954 ແລະ ປົກປັກຮັກສາສອງ ແຂວງ ເຕົ້າໂຮມ.

ໃນເມື່ອຮາກຖານການເມືອງ ກໍຄືກຳລັງປະຕິວັດ ໄດ້ຮັບການປັບປຸງເຕີບໃຫຍ່ເຂັ້ມແຂງ ຂຶ້ນຄືແນວນັ້ນ, ຄະນະພັກ ແຂວງ ນະຄອນຫລວງວຽງຈັນ ຊຸດທຳອິດໄດ້ອອກແຮງຊີ້ນຳຄະນະ ພັກ ແຕ່ລະຂັ້ນຢູ່ແຕ່ລະເມືອງ ແລະ ຮາກຖານຕໍ່ສູ້ທາງການເມືອງ ທວງໃຫ້ຝ່າຍສັດຕູປະຕິບັດ ສັນຍາເຊີແນວ ປີ 1954 ເປີດການເຈລະຈາກັບຝ່າຍແນວລາວຮັກຊາດ ແລະ ຄັດຄ້ານການນຳ ໃຊ້ກຳລັງຕີບຽດຢຶດເຂົ້າ ສອງແຂວງເຕົ້າໂຮມ ດ້ວຍຫຼາຍຮູບການ ເປັນຕົ້ນ ແຕ່ງຕົວແທນໄປພົບ ພວກເຈົ້າໜ້າທີ່ ແລະ ຊັກຖາມບັນຫາບ້ານເມືອງ, ຍື່ນຄຳສະເໜີປະທ້ວງ, ຊັກຖາມບັນດາຜູ້ ແທນລາດສະດອນ, ຍື່ນຄຳຮຽກຮ້ອງໃຫ້ປະຕິບັດນະໂຍບາຍ ແນວທາງສັນຕິພາບເປັນກາງ, ຄວາມຖືກຕ້ອງປອງດອງ ແລະ ເອກະພາບຂອງຊາດ, ຂຽນຈົດໝາຍເປີດຊອງບັດສົນເທ, ຕິດ ປ້າຍຄຳຂ້ວນ, ຫວ່ານໃບປິວ, ຂົນຂວາຍຂ້າເສິກບໍ່ໃຫ້ໄປຕີສອງແຂວງ, ຂົນຂວາຍຊາວໜຸ່ມ ບໍ່ ໃຫ້ໄປເປັນທະຫານຝ່າຍສັດຕູ ເຫດການໃຫຍ່ກວ່າໝູ່ແມ່ນ ໃນເດືອນ ມິຖຸນາ ປີ 1955 ປະຊາ ຊົນ ແລະ ພະສົງສຳມະເນນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາຢູ່ ນະຄອນຫລວງວຽງຈັນ ພາກັນ ເດີນຂະບວນ ແລະ ໂຮມຊຸມນຸມຮ້ອງຄຳຂວັນ ທວງໃຫ້ຈັກກະພັດອາເມລິກາ ອອກຈາກລາວ ກ່າວປະນາມ ພວກລູກແຫລ້ງຕົ້ນມືຜູ້ຂາຍຊາດ ທີ່ບໍ່ເຄົາລົບສັນຍາເຊີແນວ ປີ 1954 ແລະ ຄັດ ຄ້ານ ຕໍ່ການພະຍາຍາມໃຊ້ກຳລັງ ຕີບຽດຢຶດເຂົ້າ ສອງແຂວງເຕົ້າໂຮມ ຂອງຝ່າຍປະເທດລາວ (ແນວລາວຮັກຊາດ).ໂດຍປະຕິບັດຕາມນະໂຍບາຍຂອງພັກ, ວັນທີ 6 ມັງກອນ ປີ 1956 ກອງ ປະຊຸມໃຫ່ຍ ຜູ້ແທນແນວລາວອິດສະຫລະ ຄັ້ງທີ II ໄດ້ໄຂຂຶ້ນຢູ່ ແຂວງ ຫົວພັນ, ມີຜູ້ແທນເຂົ້າ

ຮ່ວມ 150 ຄົນ ທີ່ເປັນຕົວແທນໃຫ້ແກ່ບັນດາເຜົ່າ, ຊັ້ນຄົນສາສະໜາ, ຜູ້ຊົງຄຸນວຸດທິທີ່ຮັກຊາດ. ກອງປະຊຸມ ໄດ້ຜ່ານເອກະສານທີ່ສຳຄັນ ໂດຍສະເພາະ ແມ່ນໂຄງການ ການເມືອງຂອງແນວ ໂຮມ ເຊິ່ງເວລານີ້ ໄດ້ປ່ຽນຊື່ຈາກແນວລາວອິດສະຫລະມາເປັນ " ແນວລາວຮັກຊາດ " ເພື່ອໃຫ້ ຖືກກັບລັກສະນະຂອງການຕໍ່ສູ້ໃນໄລຍະໃໝ່. ແນວໂຮມດັ່ງກ່າວ ມີໜ້າທີ່ເຕົ້າໂຮມທຸກກຳລັງ, ທຸກທ່າອ່ຽງຮັກຊາດ ແລະ ກ້າວໜ້າເພື່ອປະຕະບັດມະຕິຄຳສັ່ງຂອງພັກ ຢ່າງເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງ (ພັກຢູ່ໃນຖານະປິດລັບ ແລະ ແນວໂຮມ ຢູ່ໃນຖານະເປີດເຜີຍ).



ນັກຮຽນ, ນັກສຶກສາ, ຂ້າລາດ ຊະການ ແລະ ປະຊາຊົນເດີນ ຂະບວນປະທ້ວງຈັກກະພັດ ອາເມລິກາ ທຳລາຍ ສັນຍາເຊີແນວ ປີ 1954

ກອງປະຊຸມຄັ້ງນີ້ໄດ້ສັງເກດວ່າປະຊາຊົນລາວ ໃນສະພາບການໃໝ່ນີ້ມີ 3 ໜ້າທີ່ໃຫຍ່ຄື:

1. ສາມັກຄີປອງຊົນທັງຊາດໃນແນວໂຮມແຫ່ງຊາດອັນກ້ວາງຂວາງ ເພື່ອປະຕິບັດສັນຍາ ເຊີແນວ ຢ່າງສຸດຂີດ. ເຮັດໃຫ້ປະເທດຊາດບ້ານເມືອງມີສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ເອກະພາບ.

2. ຮັກສາ ແລະ ຂະຫຍາຍກຳລັງທີ່ຮັກຊາດ ຂອງປະຊາຊົນລາວເຮົາ ເພື່ອເປັນພື້ນຖານ ອັນແໜ້ນແກ່ນໃຫ້ການຕໍ່ສູ້ອັນເປັນທຳຂອງຊາດ.

3. ຍາດແຍ່ງເອົາຄວາມເປັນໃຈ ສະໜັບສະໜູນຂອງປະຊາຊົນ ຜູ້ຮັກໜອມສັນຕິພາບ ໃນທົ່ວໂລກ.

ເນື້ອໃນໃຫຍ່ ຂອງໂຄງການ ການເມືອງຂອງແນວລາວຮັກຊາດ ມີຄື:

1. ສ້າງມະຫາສາມັກຄີປອງຊຶນທັງຊາດ ເຂົ້າຮ່ວມໃນແນວລາວຮັກຊາດ. ໂດຍບໍ່ຈຳແນກຜູ້ທີ່ໄດ້ຕໍ່ຕ້ານ ຫຼື ບໍ່ໄດ້ຕໍ່ຕ້ານ. ບໍ່ຈຳແນກຊົນຊາດ, ສາສະໜາໃດ, ບໍ່ຈຳແນກຜູ້ຮັ່ງ ຫລື ຜູ້ທຸກ, ຜູ້ເຖົ້າ ຫຼື ຜູ້ໜຸ່ມ, ແມ່ຍິງ ຫຼື ຜູ້ຊາຍ ໃຫ້ເປັນກ້ອນກຳລັງກວ້າງໃຫຍ່ ແລະ ແໜ້ນແກ່ນອັນອີງໃສ່ພື້ນຖານປະຊາຊົນ ຜູ້ອອກແຮງງານ ເພື່ອປະຕິບັດສັນຍາເຊີແນວຢ່າງສຸດຂີດ ເຮັດໃຫ້ປະເທດຊາດ ບ້ານເມືອງມີສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ເອກະພາບ.

2. ເດັດດ່ຽວໜຽວແໜ້ນ ຕ້ານຈັກກະພັດອາເມລິກາ ແລະ ພວກນິຍົມອາເມລິກາ ທີ່ພວມທຳລາຍສັນຍາເຊີແນວ. ທຳລາຍສັນຕິພາບ, ເອກະລາດ ແລະ ເອກະພາບຂອງຊາດ.

3. ປະຕິບັດສິດເສລີພາບ ປະຊາທິປະໄຕ ປະຊາຊົນ ຄື: ເສລີພາບ ໃນການຈັດຕັ້ງ, ເສລີຮ່ວມຊຸມນຸມ, ເສລີພາບໃນການປາກເວົ້າອອກຄຳຄິດຄຳເຫັນ, ເສລີພາບໃນການຂີດຂຽນ, ຈຳໜ່າຍໜັງສືພິມ ແລະ ເສລີພາບໃນການເຊື່ອຖືສາສະໜາ.

4. ເຮັດໃຫ້ລະບອບ ປ່ອນບັດ ຢ່າງທົ່ວໜ້າ ປະກົດຜົນເປັນຈິງ ເພື່ອໃຫ້ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກຊົນເຜົ່າ, ຍິງ - ຊາຍ ການເອນອຽງດ້ານການເມືອງ ຫລື ລັດທິສາສະໜາ ໄດ້ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງສະເໝີກັນ.

5. ໃຫ້ທຸກຊົນຊາດທີ່ຢູ່ຮ່ວມດິນລາວ ມີສິດສະເໝີກັນຢ່າງສົມບູນ, ຮີດຄອງປະເພນີຂອງທຸກຊົນເຜົ່າຕ້ອງໄດ້ຮັບການນັບຖື.

6. ແມ່ຍິງ ແລະ ຜູ້ຊາຍ ມີສິດສະເໝີກັນ.

7. ປ່ຽນແປງແກ້ໄຂການເປັນຢູ່ໃຫ້ຊົນຊັ້ນຕ່າງໆ..." ໂດຍຮັບປະກັນ ມີວຽກເຮັດ ງານທຳໃຫ້ຊາວຜູ້ອອກແຮງງານ. ຊ່ວຍເຫລືອທາງດ້ານອຸປະກອນການຜະລິດ, ດັດແປງລະບອບພາສີໃຫ້ເໝາະສົມ ແລະ ເປັນທຳ ພ້ອມທັງສົ່ງເສີມວຽກງານ ການສຶກສາ ວັດທະນະທຳ ແລະ ສາທາລະນະສຸກ".

ພາຍຫລັງ ກອງປະຊຸມ ສຳເລັດລົງ ພະນັກງານຜູ້ທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ນຳເອົາໂຄງການ ການເມືອງຂອງແນວລາວຮັກຊາດ ວາງອອກ ໄປຈັດຕັ້ງເຜີຍແຜ່ ແລະ ຜັນຂະຫຍາຍຢູ່ໃນໝູ່ມະຫາຊົນໃນໄລຍະອັນສັ້ນໆເທົ່ານັ້ນ, ຂະບວນການຕໍ່ສູ້ຂອງປະຊາຊົນ ໃນທົ່ວປະເທດກໍຄື ແຂວງ ນະຄອນຫລວງວຽງຈັນ ໄດ້ຂະຫຍາຍຕົວຂຶ້ນຕື່ມດ້ວຍກຳລັງແຮງ ທີ່ນັບມື້ນັບເພີ່ມທະວີ ພ້ອມທັງຕີເຂົ້າສ່ວນເລິກໃນຖັນແຖວຂອງສັດຕູ. ສະເພາະຢູ່ ນະຄອນຫລວງວຽງຈັນ ຜູ້ຊີ້ຄຸມວຸດທີ່ໄດ້ຮ່ວມກັບຝ່າຍປະເທດລາວ ສ້າງຕັ້ງຄະນະກຳມະການ ສະໜັບສະໜູນສັນຕິພາບ, ເປັນກາງຂຶ້ນ ໃນວັນທີ 17 ເດືອນ ສິງຫາ ປີ 1956 ເພື່ອຊຸກຍູ້ຂະບວນການຕໍ່ສູ້ ດັ່ງກ່າວ ໃຫ້ແຂງແຮງກວ່າເກົ່າ. ພາຍຫລັງ ການສ້າງຕັ້ງຄະນະລັດຖະບານປະສົມແຫ່ງຊາດ ຄັ້ງທີ I ໃນວັນທີ 19

ພະຈິກ ປີ 1957 ປະກອບມີ 12 ທ່ານ❶. ເພື່ອປະຕິບັດຕາມຄຳຮຽກຮ້ອງຂອງສູນກາງພັກຄະນະພັກ ນະຄອນຫລວງວຽງຈັນ ໄດ້ຮີບຮ້ອນປະຕິບັດທິດທາງແຜນການຂອງສູນກາງພັກ ຄື: ຊີ້ນຳ - ນຳພາພະນັກງານ, ສະມາຊິກພັກ ແຕ່ລະຄົນທີ່ຢູ່ນຳຮາກຖານບ້ານ ແລະ ສຳນັກງານ, ກົມກອງໃນເວລາເຂົ້າລວມລາວນີ້ ໃຫ້ໂຄສະນາເຜີຍແຜ່ແນວທາງແຜນນະໂຍບາຍຂອງພັກ ໃນໝູ່ຂ້າລາຊະການ, ຜູ້ຊົງຄຸນວຸດທິ, ພະສົງສຳມະເນນ ແລະ ປະຊາຊົນບັນດາຊັ້ນຄົນຕ່າງໆ ທັງຢູ່ໃນຕົວເມືອງ ແລະ ຊົນນະບົດໃຫ້ທຸກຄົນໄດ້ຮູ້ຈຸດປະສົງ, ອຸດົມຄະຕິຂອງຝ່າຍແນວລາວຮັກຊາດ ຊຶ່ງຍາມໃດກໍມີຄວາມປາດຖະໜາ ຢາກສ້າງຄວາມຖືກຕ້ອງປອງດອງ ຢາກໃຫ້ຊາດມີສັນຕິພາບເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ, ຈາກນັ້ນ ຈຶ່ງດຶງດູດໄດ້ຄວາມເປັນໃຈຢ່າງກວ້າງຂວາງ ຈາກມະຫາຊົນ ຊຶ່ງສະແດງ ອອກໃນການເລືອກຕັ້ງເພີ່ມເຕີມເຂົ້າໃນສະພາຜູ້ແທນລາດຊະດອນ ຄັ້ງວັນທີ 4 ເດືອນ ພຶດສະພາ ປີ 1958. ນັ້ນແມ່ນຝ່າຍປະເທດລາວ ໄດ້ຮັບໄຊຊະນະໃນການເລືອກຕັ້ງ ໂດຍໄດ້ 13 ທີ່ນັ່ງ ໃນຈຳນວນ 21 ທີ່ນັ່ງ (ເທົ່າກັບ 2/3).

2. ໄລຍະການຫັນທິດຕໍ່ສູ້ ແລະ ຕ້ານສົງຄາມພິເສດຂອງອາເມລິກາ ປີ 1959 - 1962.

ໃນຄະນະ ທີ່ຝ່າຍປະເທດລາວ (ແນວລາວຮັກຊາດ) ພວມອອກແຮງຈັດຕັ້ງປະຕິບັດເນື້ອໃນສັນຍາສ້າງຄວາມຖືກຕ້ອງປອງດອງຊາດ ຄັ້ງທີ I ຢ່າງຕັ້ງໜ້າຢູ່ນັ້ນ, ພວກຈັກກະພັດອາເມລິກາ ແລະ ລູກມືຂອງມັນ ຊ້ຳພັດອອກແຮງມ້າງເພທຳລາຍສັນຍາ ເຮັດໃຫ້ຄວາມຫວັງຂອງປວງຊົນລາວທັງຊາດ. ເຫັນຊາດມີຄວາມເປັນເອກະລາດ ມີອຳນາດອະທິປະໄຕ ປະຊາຊົນມີຄວາມຢູ່ເຢັນເປັນສຸກນັ້ນ ໄດ້ຖືກທຳລາຍໃຫ້ສູນຫາຍໄປດ້ວຍນ້ຳມືຂອງພວກເຂົາ. ພວກເຂົາໄດ້ທຳການໂຄ່ນລົ້ມ ລັດຖະບານປະສົມຊື່ອຄາວ ແຫ່ງຊາດ ທີ່ມີເຈົ້າ ສຸວັນນະພູມມາ ເປັນນາຍົກລັດຖະມົນຕີ ໃນວັນທີ 22 ກໍລະກົດ ປີ 1958, ຈາກນັ້ນ ກໍໄດ້ແຕ່ງຕັ້ງ ຜຸຍ ຊະນະນິກອນ ເປັນນາຍົກ ແລະ ປະກອບລັດຖະບານຊຸດໃໝ່ຂຶ້ນ ໃນວັນທີ 18 ເດືອນ ສິງຫາ ປີ 1958 ໂດຍບໍ່ມີການເຂົ້າຮ່ວມຂອງຝ່າຍປະເທດລາວ, ຕົ້ນປີ 1959 ລັດຖະບານ ຜຸຍ ຊະນະນິກອນ ໄດ້ປະ

---

(1).ເດືອນ 8 -1957 ໃນຄະນະລັດຖະບານມີລັດຖະມົນຕີພຽງ 6 ທ່ານ, ຄັ້ງວັນທີ 19.11.1957 ປະກອບມີ: ສະວັນນະພູມາ ເປັນນາຍົກທັງເປັນລັດຖະມົນຕີໄປສະນີ, ໂທລະຄົມມະນາຄົມ ແລະ ຖະແຫລງຂ່າວ; ຜຸຍຊະນະນິກອນ ເປັນລັດຖະມົນຕີຕ່າງປະເທດ; ໂງ່ນຊະນະນິກອນ ເປັນລັດຖະມົນຕີປ້ອງກັນຊາດ, ນັກຮົບເກົ່າ, ເຍົາວະຊົນ ແລະ ກິລາ; ກະຕ່າຍ ໂດນສະສຸລິດ ລັດຖະມົນຕີກະຊວງມະຫາດໄທ, ທອງດີສູນທອນ ວິຈິດ ລັດຖະມົນຕີ ກະຊວງຍຸດຕິທຳ; ເຫລື່ອມ ອິນສີຊຽງໃໝ່ ລັດຖະມົນຕີກະຊວງການເງິນ; ອຸ່ນເຮືອນ ນໍລະສິງ ລັດຖະມົນຕີກະຊວງເສດຖະກິດ; ປະທານສຸພານຸວົງ ລັດຖະມົນຕີກະຊວງແຜນຜັງ, ກໍ່ສ້າງ ແລະ ເຄຫາສະຖານ; ເຈົ້າສຸກວົງສັກລັດຖະມົນຕີກະຊວງແຮງງານ - ສັງຄົມ ແລະ ຂົນສົ່ງ; ດຣ ອຸດົມ ລັດຖະມົນຕີກະຊວງສາທາລະນະສຸກ; ຫຍຸຍ ອາໄພ ລັດຖະມົນຕີກະຊວງສຶກສາ; ທ່ານພູມີ ວົງວິຈິດ ລັດຖະມົນຕີກະຊວງທຳມະການ ແລະ ສິລະປະກອນ. ປະຫວັດສາດລາວດຶກດຳບັນປີ 2000,ໜ້າ853.

ກາດໃຊ້ກົດໝາຍ ຕ້ານກອມມູນິດ ແລະ ຖະແຫລງວ່າສັນຍາເຊີແນວ ປີ 1954 ກ່ຽວກັບອິນດູຈີນ ໄດ້ໝົດຄວາມສັກສິດແລ້ວ, ພວກເຂົາຄິດວ່າ ຄັ້ງນີ້ແມ່ນແຜນການຫລອກເສືອ ອອກຈາກຖ້ຳ ຂອງພວກເຂົາຕ້ອງສຳເລັດ, ດັ່ງນັ້ນ ພວກເຂົາຈຶ່ງເພີ້ມທະວີການປາບປາມ ຫວັງດັບສູນກຳລັງການປະຕິວັດ, ໃນວັນທີ 11 ເດືອນ ພຶດສະພາ ປີ 1959 ລັດຖະບານ ຜຸຍ ຊະນະນິກອນ ໄດ້ອອກຄຳສັ່ງປົດລ້ອມ ກອງພັນທີໜຶ່ງ ຂອງຝ່າຍປະເທດລາວ ທີ່ຕັ້ງຢູ່ຊຽງເງິນ (ແຂວງ ຫລວງພະບາງ) ແລະ ກອງພັນທີສອງ ທີ່ຕັ້ງຢູ່ທົ່ງໄຫຫີນ (ແຂວງ ຊຽງຂວາງ). ການຄືນຂອງວັນທີ 12 ພຶດສະ ປີ 1959 ພວກເຂົາສັ່ງໃຫ້ຕຳຫລວດປົດລ້ອມເຮືອນຢູ່ ຂອງສະເດັດເຈົ້າສຸພານຸວົງ ແລະ ເຮືອນຢູ່ຂອງບັນດາຜູ້ນຳອື່ນໆ ຂອງພັກ ແລະ ຂອງແນວລາວຮັກຊາດ ທີ່ເປັນສະມາຊິກສະພາຜູ້ແທນລາສະດອນຢູ່ວຽງຈັນ ພ້ອມກັນນັ້ນ ກໍອອກຄຳສັ່ງໃຫ້ປິດປະຕູໂຮງພິມ ຂອງໜັງສືພິມແນວລາວຮັກຊາດ. ພວກເຂົາອອກຄຳສັ່ງ ເປີດປັ້ນເຄື່ອນທັບກວາດລ້າງເຂົ້າບັນດາແຂວງ ຄື: ຫົວພັນ, ຊຽງຂວາງ, ຜົ້ງສາລີ, ຫລວງພະບາງ, ຄຳມ່ວນ ແລະ ແຂວງ ນະຄອນຫລວງວຽງຈັນ ໝາຍຈະເຂັ່ນຂ້ານັກຕໍ່ຕ້ານເກົ່າ ກໍຄືຫລັກແຫລ່ງແກ່ນສານ ຂອງການປະຕິວັດຢູ່ແຕ່ລະບ້ານ, ດັບສູນກຳລັງຝ່າຍປະເທດລາວ ແລະ ທຳລາຍຮາກຖານການປະຕິວັດ. ມາຮອດ ວັນທີ 28 ກໍລະກົດ ປີ 1959, ລັດຖະບານ ຜຸຍ ຊະນະນິກອນ ໄດ້ອອກຄຳສັ່ງຈັບ ແລະ ກັກຂັງສະເດັດເຈົ້າ ສຸພານຸວົງ ພ້ອມດ້ວຍຜູ້ນຳອື່ນໆ ແລະ ພະນັກງານຂອງພັກ, ຂອງແນວລາວຮັກຊາດທີ່ຢູ່ວຽງຈັນ ຢ່າງບັງອາດ ແລະ ຜິດກົດໝາຍ. ພວກເຂົາເອົາສະເດັດເຈົ້າ ສຸພານຸວົງ ພ້ອມດ້ວຍຜູ້ນຳອື່ນໆ ແລະ ພະນັກງານຂອງພັກ, ຂອງແນວລາວຮັກຊາດ ຈຳນວນທີ່ຖືກຈັບໄປເຂົ້າຄຸກຢູ່ ໂພນເຄັງ ທີ່



ລັດຖະບານປະສົມແຫ່ງຊາດ ຄັ້ງທີ I ປີ 1957

ນະຄອນຫລວງວຽງຈັນ. ແນໃສ່ຂົ່ມຂູ່ຈິດໃຈຮັກຊາດຂອງປະຊາຊົນລາວ ກໍຄືຊາວນະຄອນຫຼວງວຽງຈັນ. ແຕ່ການຈັບ ສະເດັດເຈົ້າ ສຸພານຸວົງ ແລະ ຜູ້ນໍາອື່ນໆ ປຽບເໝືອນຖອກນໍ້ມັນໃສ່ໄຟ.

ຢືນຕໍ່ໜ້າສະພາບການດັ່ງກ່າວ ທີ່ບໍ່ມີຜົນດີຕໍ່ການປະຕິວັດ. ພັກຈໍາເປັນຕ້ອງມີວິທີແກ້ໄຂທີ່ສອດຄ່ອງ ເພື່ອບໍ່ເຮັດໃຫ້ການປະຕິວັດໄດ້ຮັບຄວາມເສຍຫາຍ. ສູນກາງພັກໄດ້ມີກອງປະຊຸມກັນ ແລະ ໄດ້ຕົກລົງຫັນທິດການຕໍ່ສູ້ ຕາມທິດນໍາ ສົມທົບການຕໍ່ສູ້ ດ້ານການເມືອງ ກັບການຕໍ່ສູ້ດ້ວຍອາວຸດ; ດ້ານໜຶ່ງສືບຕໍ່ເຊີດຊູ ຄົ້ນທຸງ ສົ້ນຕິພາບ ເປັນກາງ ແລະ ປອງດອງຊາດ ເພື່ອຍາດເອົາຫາງສຽງສະໜັບສະໜູນຢູ່ພາຍໃນ ແລະ ຕ່າງປະເທດ, ຜັນແຍກຖົ້ນແຖວຂອງສັດຕູ, ສຸກຍູ້ຂະບວນການຕໍ່ສູ້ ດ້ານການເມືອງ ຢູ່ໃນທົ່ວປະເທດ; ດ້ານໜຶ່ງອີກແມ່ນ ເດັດດ່ຽວປຸກລະດົມຂົນຂວາຍປະຊາຊົນພ້ອມກັນລຸກຂຶ້ນຕໍ່ສູ້ດ້ວຍອາວຸດເພື່ອຊ່ວຍໜູນໃຫ້ແກ່ການຕໍ່ສູ້ທາງການເມືອງ.

ເພື່ອຈັດຕັ້ງປະຕິບັດ ທິດທາງນະໂຍບາຍຂອງສູນກາງພັກ ດັ່ງກ່າວນັ້ນ ຄະນະພັກ, ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ຢູ່ແຂວງ ນະຄອນຫລວງວຽງຈັນ ຊຶ່ງເປັນບ່ອນໃຈກາງຂອງປະເທດນັ້ນ ແມ່ນໄດ້ແບກຫາບພາລະໜ້າທີ່ຫລາຍທີ່ສຸດ ຕໍ່ການປະກອບສ່ວນ ເຮັດໃຫ້ການປະຕິວັດຂອງຊາດ ໄດ້ຜ່ານພົ້ນໄພອັນຕະລາຍ ກ້າວຂຶ້ນຍາດເອົາໄຊຊະນະ ໃນແຕ່ລະຄັ້ງ ແລະ ໃຫຍ່ຫລວງກວ່າເກົ່າ.

- ດ້ານວຽກງານປັບປຸງ, ກໍ່ສ້າງກໍາລັງ.

ປີ 1958 ສູນກາງພັກ ໄດ້ຕົກລົງເອົາ ສະຫາຍ ທິດມ່ວນ ສາວຈັນທະລາ ໃນນາມກໍາມະການສູນກາງພັກ ມາເປັນເລຂາພັກແຂວງແທນ ຈານຕັນ ແລະ ເປັນເຈົ້າແຂວງແທນ ພໍ່ສະແຫວງ (ເວລານີ້ ສະຫາຍ ທິດມ່ວນ ສາວຈັນທະລາ ເປັນທັງເລຂາພັກແຂວງ ເຈົ້າແຂວງໆ ວຽງຈັນ ກໍຄືນະຄອນຫລວງວຽງຈັນ) ຈາກນັ້ນ ສະຫາຍເລຂາພັກແຂວງ ນະຄອນຫລວງວຽງຈັນ ຈຶ່ງໄດ້ຮຽກໂຮມເອົາບັນດາສະຫາຍ ທີ່ຮັບຜິດຊອບໃນຄະນະພັກເມືອງ ຢູ່ແຕ່ລະເຂດ ມາເອກະພາບກັນກ່ຽວກັບການປັບປຸງ - ກໍ່ສ້າງກໍາລັງ ແລະ ຈັດວາງກໍາລັງສຸມໃສ່ປະຕິບັດໜ້າທີ່ ສະເພາະໜ້າທີ່ອັນຮີບດ່ວນ ທີ່ສູນ ກາງພັກວາງອອກ ຊຶ່ງກ່ອນອື່ນໝົດແມ່ນບັນຫາຕໍ່ສູ້ຄັດຄ້ານການຈັບຜູ້ນໍາຂອງຝ່າຍປະເທດລາວ ເຂົ້າຄຸກຢູ່ ໂພນເຄັງ ຂອງ ພວກ ຜຸຍ ຊະນະນິກອນ.



ສະຫາຍ ທິດມ່ວນ ສາວຈັນທະລາ
ເລຂາພັກແຂວງນະຄອນ
ຫລວງວຽງວຽງຈັນ
ຜູ້ທີ່ສອງແທນສະຫາຍ
ຈານຕັນ (ພໍ່ຕຽງ)

- ການໂຄສະນາປຸກລະດົມຂົນຂວາຍທາງດ້ານການເມືອງ.

ຄະນະພັກແຂວງນະຄອນຫຼວງວຽງຈັນ ໄດ້ອອກແຮງຊີ້ນຳປຸກລະດົມຂົນຂວາຍນັກຮຽນ, ນັກສຶກສາປັນຍາຊົນ, ພະສົງສຳມະເນນ. ຜູ້ຊົງຄຸນວຸດທິ ກໍຄືປະຊາຊົນ ບັນດາຊັ້ນຄົນຕ່າງໆ ຢູ່ພາຍໃນນະຄອນຫລວງວຽງຈັນ ແລະ ອ້ອມຂ້າງຕົວເມືອງ ໃຫ້ເຫັນໄດ້ເຈດຈຳນົງອັນຊົ່ວຮ້າຍ ຂອງຈັກກະພັດອາເມລິກາ ແລະ ລູກມືທີ່ໄດ້ທຳການໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດ ຄັ້ງທີ່ໜຶ່ງ, ໃຊ້ກຳລັງທະຫານປາບປາມກຳລັງປະຕິວັດ ແລະ ຈັບຜູ້ນຳແນວລາວຮັກຊາດ ເຂົ້າຄຸມຂັງ, ຜ່ານການປຸກລະດົມຂົນຂວາຍ ດັ່ງກ່າວ ແມ່ນສາມາດດຶງດູດຄວາມເຫັນພ້ອມເປັນໃຈ ຢ່າງຫຼວງຫຼາຍ ຈາກທຸກຊົນຊັ້ນໃນສັງຄົມຂອງແຂວງ ນະຄອນຫລວງວຽງຈັນ ເຊັ່ນ: ວັນທີ 28 ເດືອນ ກໍລະກົດ ປີ 1959 ມື້ທີ່ ຜຸຍ ຊະນະນິກອນ ສັ່ງຈັບສະເດັດເຈົ້າ ສຸພານຸວົງ ພ້ອມຜູ້ນຳຂອງຝ່າຍ ປະເທດລາວ ເຂົ້າຄຸມຂັງນັ້ນ ຄະນະພັກແຂວງ ໄດ້ນຳພາຂະບວນກຳມະກອນ, ນັກຮຽນ, ຂ້າລາຊະການ, ພະສົງສາມະເນນ, ຜູ້ຊົງຄຸນວຸດທິ ພ້ອມດ້ວຍປະຊາຊົນ ຈຳນວນຫຼວງຫຼາຍພາກັນໄປ ແຫ່ຂະບວນຢູ່ຕໍ່ໜ້າຫ້ອງການ ສະພາຜູ້ແທນລາດສະດອນ ທວງໃຫ້ລັດຖະບານ ຜຸຍ ຊະນະນິ ກອນ ຕ້ອງປ່ອຍຕົວບັນດາຜູ້ນຳຂອງແນວລາວຮັກຊາດທັນທີ ແລະ ບໍ່ໃຫ້ເອົາພວກເພີ່ນຂຶ້ນສານ ຕັດສິນ. ອັນໄດ້ເຮັດໃຫ້ລັດຖະບານ ຜຸຍ ຊະນະນິກອນ ມີຄວາມສະທ້ານຢ້ານກົວ ແລ້ວລື່ອນ ການດຳເນີນຄະດີຕໍ່ຜູ້ນຳອອກໄປຢ່າງບໍ່ມີກຳນົດ.



ເຊັນສັນຍາ ໂຮມເອົາກອງທະຫານຂອງປະເທດລາວ
ເຂົ້າຮ່ວມຢູ່ໃນກອງທັບລາຊະອານາຈັກ

ຄືນຂອງວັນທີ 23 -24 ພຶດສະພາ ປີ 1960, ປະຕິບັດຕາມຄຳສັ່ງຂອງ ຄະນະບໍລິຫານງານສູນກາງພັກ, ພະນັກງານສືບຂ່າວລັບຈຳນວນໜຶ່ງ ເຄື່ອນໄຫວຢູ່ຕົວເມືອງວຽງຈັນ ໄດ້ປະສານສົມທົບກັບອ້າຍນ້ອງສາລະວັດທະຫານ ຝ່າຍລາຊາອານາຈັກລາວ ຜູ້ທີ່ມີຄວາມຕື່ນຕົວຮັກຊາດ ເຮັດໜ້າທີ່ເວນຍາມຄຸກ ໂພນເຄັງ ໄດ້ພ້ອມກັບປະຊາຊົນ ພະນັກງານແກ່ນສານຂອງການປະຕິວັດຢູ່ທ້ອງຖິ່ນ ຕິດຕໍ່ພົວພັນ,ພາທາງ ແລະ ປ້ອງກັນເອົາຜູ້ນຳແນວລາວຮັກຊາດ 16 ທ່ານ ອອກຈາກຄຸກ ໂພນເຄັງ ນະຄອນຫລວງວຽງຈັນ ໄປສູ່ເຂດທີ່ໝັ້ນ ຂອງການປະຕິວັດຢ່າງປອດໄພ. ນີ້ແມ່ນເຫດການ ທີ່ສະເທືອນຕໍ່ຫາງສຽງໂລກ, ເຮັດໃຫ້ຈັກກະພັດອາເມລິກາ ແລະ ລູກມືຕົກສະທ້ານຢ້ານກົວ. ແຕ່ພັດເປັນການປຸກລະດົມກຳລັງໃຈ ແລະ ຄວາມປິຕິຊົມຊື່ນ ຢ່າງໃຫ່ຍຫລວງຂອງກຳລັງປະຕິວັດ ແລະ ປະຊາຊົນ ໃນທົ່ວປະເທດ. ການແຫກຄຸກທີ່ມະຫັດສະຈັນ, ມັນສະແດງເຖິງແຜນນະໂຍບາຍ ອັນຖືກຕ້ອງຂອງສູນກາງພັກ ອັນມີປະທານ ໄກສອນ ພົມວິຫານ ເປັນຜູ້ນຳໜ້າ, ຄວາມສາມາດໃນການຈັດຕັ້ງຊີ້ນຳຂອງຄະນະພັກວຽງຈັນ ແລະ ຂອງບັນດາຜູ້ນຳທີ່ຢູ່ໃນຄຸກ, ສະແດງເຖິງການປົກປ້ອງຂອງມະຫາຊົນທີ່ຮັກຊາດ ແລະ ການຊ່ວຍເຫລືອຂອງບັນດາສາລະວັດ ທະຫານ ຝ່າຍວຽງຈັນ ທີ່ຕື່ນຕົວຮັກຊາດ.



ຄຸກນຳເບີ້ 11 ຂອງສັດຕູ ຢູ່ຄ້າຍ ໂພນເຄັງ ທີ່ພວກຫຸ່ນວຽງຈັນ
ຈັບຜູ້ນຳຂອງກຳລັງຮັກຊາດກັກຂັງ ປີ 1959

★ ບັນດາທ່ານຜູ້ນຳ, ພະນັກງານແນວລາວຮັກຊາດທີ່ຖືກກັກຂັງ ແລະ ໂຕນອອກຈາກຄຸກໂພນເຄັງ ໃນວັນທີ 23 - 24/5/1960 ມີ:

1. ສະເດັດເຈົ້າ ສຸພານຸວົງ
2. ທ່ານ ໜູຮັກ ພູມສະຫວັນ
3. ທ່ານ ພູມີ ວົງວິຈິດ
4. ທ່ານ ພູນ ສີປະເສີດ
5. ທ່ານ ໝື່ນ ສົມວິຈິດ
6. ທ່ານ ມາ ໄຂຄຳພິທູນ
7. ທ່ານ ສີສະນະ ສີສານ
8. ທ່ານ ສົງກະໂປ ສີໂຄດຈຸນລະມະນີ
9. ທ່ານ ຄຳຜາຍ ບຸບຜາ
10. ທ່ານ ສີທົນ ກົມມະດຳ
11. ທ່ານ ມະຫາສົມບູນ ວົງໜໍ່ບຸນທຳ
12. ທ່ານ ຄຳເພັດ ພົມມະຈັນ
13. ທ່ານ ເພົ້າ ພົມມະຈັນ
14. ທ່ານ ພູເຂົາ
15. ທ່ານ ບົວສີ ຈະເລີນສຸກ
16. ທ່ານ ມານະ ວົງອິສານ

24/VII
ห้ามจำหน่าย



ສະເດັດເຈົ້າ ສຸພານຸວົງ



ທ່ານ ໜູຮັກ ພູມສະຫວັນ



ທ່ານ ພູມີ ວົງວິຈິດ




ທ່ານ ພູມ ສີປະເສີດ



ທ່ານ ໝື່ນ ສົມວິຈິດ



ທ່ານ ມາ ໄຂຄຳພິທູນ




ທ່ານ ສີສະນະ ສີສານ



ທ່ານ ສິງກະໂປ ສີໂຄດຈຸນລະມະນີ



ທ່ານ ຄຳຜາຍ ບຸບຜາ



ທ່ານ ສິຫົນ ກົມມະດຳ



ທ່ານ ມະຫາສົມບູນ ວົງໜໍ່ບຸນທຳ



ທ່ານ ຄຳເພັດ ພົມມະຈັນ



ທ່ານ ເຜີ້ ພົມມະຈັນ



ທ່ານ ພູເຂົາ



ທ່ານ ບົວສີ ຈະເລີນສຸກ



ທ່ານ ມາມະ ວົງອີສານ

★ ອ້າຍນ້ອງສາລະວັດທະຫານ ຝ່າຍລາຊະອານາຈັກ ຜູ້ທີ່ຕື່ນຕົວຮັກຊາດ ຍາມຄຸກ ໄດ້ເຫັນແຈ້ງແນວທາງອັນເປັນທຳຂອງການປະຕິວັດ, ເຫັນຄວາມໂຫດຮ້າຍປ່າເຖື່ອນຂອງອຳນາດການປົກຄອງລາຊະອານາຈັກລາວ ໄດ້ນຳພາ ແລະ ປ້ອງກັນບັນດາທ່ານຜູ້ນຳ ແລະ ພະນັກງານຂອງແນວລາວຮັກຊາດ ອອກຈາກຄຸກມີ:

1. ທ່ານ ອຸດອນ (ຫລີ ໂພໄຊ)
2. ທ່ານ ຄຳພອນ
3. ທ່ານ ທອງສາ
4. ທ່ານ ກອງຄຳ
5. ທ່ານ ຈັນທະວີ
6. ທ່ານ ຄຳແວວ
7. ທ່ານ ທອງເສີຍ
8. ທ່ານ ອິນແປງ

9. ທ່ານ ສຳລີ

10. ທ່ານ ບົວຜັນ ໄດ້ອອກໄປຕາມຫລັງ.

★ ພະນັກງານພື້ນຖານການປະຕິວັດ ທີ່ເຂົ້າໄປຕິດຕາມຢູ່ໃນຄຸກ ເພື່ອກະກຽມໃຫ້ແກ່ບັ້ນແຫກຄຸກ ຂອງຜູ້ນຳແນວລາວຮັກຊາດ ອອກໄປເຂດທີ່ໝັ້ນຂອງການປະຕິວັດມີ 1 ທ່ານ ຄື:

1. ທ່ານ ຊຽງສົມ ກຸນລະວົງ. ພ້ອມດ້ວຍພະນັກງານພື້ນຖານປະຕິວັດຢູ່ວຽງຈັນ ເຂົ້າຮ່ວມ ເຄື່ອນໄຫວກະກຽມເອົາບັນດາຜູ້ນຳແນວລາວຮັກຊາດອອກຈາກຄຸກຄື:

1. ສະຫາຍ ເຕັມ ບ້ານ ນາຊອມ, ຫົວຂົວ ເມືອງນາຊາຍທອງ
2. ນະຫາ ຕານ ບ້ານ ນາຍາງ ເມືອງ ນາຊາຍທອງ
3. ພໍ່ບົດ ແລະ ແມ່ບົດ ບ້ານ ນາຍາງ ເມືອງ ນາຊາຍທອງ
4. ພໍ່ຖົມ ບ້ານ ນາຍາງ ເມືອງ ນາຊາຍທອງ
5. ແມ່ຕູ້ ກອງຄຳ ບ້ານ ນາຍາງ ເມືອງ ນາຊາຍທອງ
6. ແມ່ຕູ້ ພັນ ບ້ານ ດົງນາໂຊກ ເມືອງ ສີໂຄດຕະບອງ
7. ລຸງທິດ ແໜ້ນ ບ້ານ ດອນໜູນ ເມືອງໄຊທານີ
8. ສະຫາຍ ວັນ ຫລີ ຈານຝັ້ນ ບ້ານ ດອນໜູນ ເມືອງ ໄຊທານີ



ສາລາວັດທະຫານ 9 ຄົນ ຖ່າຍຮູບເປັນທີ່ລະນຶກ

ຢືນ: ຊ້າຍ ຫາ ຂວາ : ທ່ານ ບຸນແປງ, ທ່ານ ຄຳແວວ, ທ່ານ ບົວຜັນ, ທ່ານ ອຸດອນ (ໂພໄຊ), ທ່ານ ຈັນທະວີ, ທ່ານ ສຳລີ

ນັ່ງ: ທ່ານ ທອງເສີຍ ໂຄດວົງສີ, ທ່ານ ຄຳພອນ(ອ່ອນຈັນ), ທ່ານ ອ່ອນສາ



ຈຳລອງຮູບພາບ ບັນດາຜູ້ນຳແນວລາວຮັກຊາດໂຕນອອກຈາກຄຸກໂພນເຄັ່ງ



ທ່ານ ສຸພານຸວົງ ພ້ອມກັບຜູ້ນຳແນວລາວຮັກຊາດ ກັບຄືນສູ່ເຂດທີ່ໝັ້ນປະຕິວັດ
ພາຍຫລັງການແຫກຄຸກ ໂພນເຄັ່ງ 1960

◆ **ເຫດການລັດຖະປະຫານ:**

ພາຍຫລັງກອງປະຊຸມ ຄະນະບໍລິ ຫານງານສູນກາງພັກຄັ້ງທີ4 ເດືອນມິຖຸນາ ປີ 1960 ສຳເລັດລົງ ໄດ້ສົ່ງຜົນສະທ້ອນຢ່າງແຮງ ເຂົ້າໃນຊັ້ນຄົນຕ່າງໆ ຢູ່ໃນຕົວເມືອງ ກໍຄືຊົນນະບົດ ເປັນຕົ້ນ ແມ່ນຜູ້ຊົງຄຸນວຸດທິ, ປັນຍາຊົນ, ທະຫານ, ຕຳຫລວດ ຂອງລາຊະອານາຈັກລາວຢູ່ນະຄອນຫຼວງວຽງຈັນ ໄດ້ລຸກຂຶ້ນເປັນຂະບວນຕໍ່ສູ້ ຕ້ານຈັກກະພັດອາເມລິກາ ຜູ້ຮຸກຮານ ແລະ ສົມທົບກັບສະພາບຢູ່ ນະຄອນຫຼວງວຽງຈັນ ເວລານັ້ນ ໄດ້ເປັນກະແສຟອງປະຕິວັດບຸກສັດຕູຢ່າງຕໍ່ເນື່ອງ ຈາກນັ້ນ ຈົ່ງພາໄປເຖິງ ວັນທີ 9 ສິງຫາ ປີ 1960 (ປະມານ 3 ໂມງເຊົ້າ) ກອງພັນນ້ອຍທະຫານລາບອາກາດ ທີ 2 ຂອງກອງທັບລາຊະອານາຈັກລາວ ໂດຍມີພາກສ່ວນໜຶ່ງຂອງກຳລັງຕຳຫລວດເຂົ້າຮ່ວມ. ຊຶ່ງບັນຊາໂດຍ ຮ້ອຍເອກ ກອງແລ, ຮ້ອຍໂທ ເດືອນ ສູນນະ ລາດ, ຮ້ອຍຕີ ທຽບ ສິດທິເດດ ໄດ້ລຸກຂຶ້ນເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານ ສົມສະໜິດ - ພູມີໜໍ່ສະຫວັນ ຢູ່ນະຄອນຫລວງວຽງຈັນ ກຳລັງລັດຖະປະຫານ ໄດ້ອອກຖະແຫລງການນະໂຍບາຍ " ຕ້ານການແຊກແຊງຂອງອາເມລິກາ, ຢຸດຕິສົງຄາມກາງເມືອງ, ຟື້ນຟູສັນຕິພາບປອງດອງຊາດ, ເຈລະຈາກັບຝ່າຍປະເທດລາວ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ຂັບໄລ່ຈັກກະພັດອາເມລິກາ ຜູ້ຮຸກຮານອອກຈາກລາວ ". ການລັດຖະປະຫານຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກຊາວໜຸ່ມນັກຮຽນ, ນັກສຶກສາ ແລະ ປະຊາຊົນ ນະຄອນຫລວງວຽງຈັນ.

ມາຮອດວັນທີ 13 ສິງຫາ ປີ 1960 ໂດຍພາຍໃຕ້ການຊີ້ນຳຂອງສູນກາງພັກ. ຄະນະພັກ ແຂວງ ນະຄອນຫລວງວຽງຈັນ ໄດ້ປຸກລະດົມຊາວນະຄອນຫລວງວຽງຈັນ ຫລາຍໝື່ນຄົນ ລຸກຮື້ຂຶ້ນຕໍ່ສູ້ການເມືອງ, ການທະຫານ. ກຳລັງການເມືອງຂອງທຸກຊັ້ນຄົນ ໄດ້ແຫ່ຂະບວນຕາມຖະໜົນ, ຫົນທາງ ແລະ ມາໂຮມຊຸມນຸມກັນຢູ່ຕໍ່ໜ້າສຳນັກງານສະພາຜູ້ແທນລາດສະດອນ ເພື່ອສະໜັບສະໜູນ ຄະນະລັດຖະປະຫານ ທວງໃຫ້ຈັດຕັ້ງ ຄະນະລັດຖະບານຊຸດໃໝ່ ທີ່ເດີນຕາມເສັ້ນທາງສັນຕິພາບເປັນກາງ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ ວັນທີ 17 ສິງຫາ ປີ 1960, ລັດຖະບານຊຸດໃໝ່ ໄດ້ຮັບການສ້າງຕັ້ງຂຶ້ນໂດຍແມ່ນ ເຈົ້າ ສຸວັນນະພູມມາ ເປັນນາຍົກລັດຖະມົນຕີ. ລັດຖະບານນີ້ ໄດ້ມີການຮັບຮອງຈາກສະພາຜູ້ແທນລາດສະດອນ.



ທະຫານກອງພັນນ້ອຍ ທະຫານລາບອາກາດທີ່ 2

ລັດຖະບານຊຸດໃໝ່ ໄດ້ປະກາດສືບຕໍ່ປະຕິບັດນະໂຍບາຍສັນຕິພາບເປັນກາງ ແລະ ຄວາມຖືກຕ້ອງປອງດອງຊາດ.



ຂ້າລະຊະການ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ທີ່ວຽງຈັນ
ເດີນຂະບວນສະໜັບສະໜູນ ຄະນະລັດຖະປະຫານ 9.8.1960.

ວັນທີ 1 ເດືອນ ກັນຍາ ປີ 1960 ຢູ່ທີ່ນະຄອນຫລວງວຽງຈັນ, ປະຊາຊົນຜູ້ອອກແຮງງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ພະສົງສຳມະເນນ, ຜູ້ຊົງຄຸນວຸດທິຈຳນວນ 3000 ຄົນ, ຈັດຕັ້ງໂຮມຊຸມນຸມມິດຕິງຄັດຄ້ານ ແລະ ປະທ້ວງລັດຖະບານຊຸດໃໝ່ ທີ່ຮັບເອົາກຸ່ມ ພູມີ ໜໍ່ສະຫວັນ ເຂົ້າຢູ່ໃນຄະນະລັດຖະບານ.

ວັນທີ 13 ເດືອນ ກັນຍາ ປີ 1960 ປະຊາຊົນຊັ້ນຄົນຕ່າງໆ ໃນນະຄອນຫລວງວຽງຈັນ ກວ່າສາມໝື່ນຄົນ ໂຮມຊຸມນຸມມິດຕິງ ສະໜັບສະໜູນແນວທາງສັນຕິພາບເປັນກາງ ແລະ ປອງດອງຊາດ ຂອງລັດຖະບານລາຊະອານາຈັກລາວ ແລະ ຄະນະລັດຖະປະຫານ, ຄັດຄ້ານພວກປະຕິການ ພູມີ ໜໍ່ສະຫວັນ.

ວັນທີ 1 ເດືອນ ທັນວາ ປີ 1960 ຊາວໜຸ່ມນະຄອນຫລວງວຽງຈັນ ກ່ວາ 300 ຄົນ ຈັດຕັ້ງການປະທ້ວງຢູ່ຕໍ່ໜ້າສະພາຜູ້ແທນລາສະດອນ ຄັດຄ້ານການອະນຸຍາດໃຫ້ພວກກະບົດ ພູມີໜໍ່ສະຫວັນ ແລະ ບຸນອຸ້ມ ເຂົ້າຮ່ວມລັດຖະບານ.

- ການຕໍ່ສູ້ດ້ວຍກຳລັງອາວຸດ.

ໂດຍປະຕິບັດຕາມທິດທາງຫັນທິດຕໍ່ສູ້ດ້ວຍກຳລັງອາວຸດ ສົມທົບກັບການຕໍ່ສູ້ການເມືອງ ຂອງສູນກາງພັກນັ້ນ ມາຮອດປີ 1960 ການຕໍ່ສູ້ດ້ວຍສົງຄາມກອງທລອນ ໄດ້ລະເບີດຂຶ້ນໃນ


ທົ່ວແຂວງ ນັບແຕ່ທົ່ງພຽງຮອດພູດອຍ, ກຳລັງດັ່ງກ່າວ ໄດ້ອອກແຮງສະກັດລັດຕິກຳລັງຂອງສັດຕູ ທີ່ອອກເຄື່ອນໄຫວກວາດລ້າງ ແລະ ເຄື່ອນໄຫວໄປມາດ້ວຍລົດ,ເຮືອ ແລະ ທາງຍ່າງ ຢູ່ພາຍໃນແຂວງຢ່າງຕັ້ງໜ້າ ອັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ຝ່າຍສັດຕູຢ່າງໜວງໜາຍ.

ບັ້ນຮົບຕໍ່ສູ້ຕ້ານການບຸກໂຈມຕີຂອງພູມີໜໍ່ສະຫວັນ.

ໃນເມື່ອ ນະຄອນຫລວງວຽງຈັນ ຕົກຢູ່ໃນກຳມືຂອງ ຄະນະລັດຖະປະຫານ ແລະ ລັດຖະບານ ສຸວັນນະພູມາ ທີ່ຮ່ວມກັບກຳລັງແນວລາວຮັກຊາດແລ້ວ. ພວກພູມມີ ໜໍ່ສະຫວັນ ໄດ້ລວມຫົວກັບ ບຸນອຸ້ມ ນະຈຳປາສັກ ຈັດຕັ້ງຄະນະປະຕິວັດ ແລະ ລັດຖະບານທ້ອງຖິ່ນຕາງໜ້າຂຶ້ນທີ່ແຂວງ ສະຫວັນນະເຂດ ໂດຍແມ່ນ ບຸນອຸ້ມ ເປັນນາຍົກລັດຖະມົນຕີ ແລະ ພູມີໜໍ່ ສະຫວັນ ເປັນຮອງ. ລັດຖະບານປະຕິການຂອງ ພູມີ ໜໍ່ສະຫວັນ - ບຸນອຸ້ມ ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອ ຈາກຈັກກະພັດອາເມລິກາ ແລະ ລັດຖະບານ ສະຫລິດທະນະລັດ (ນາຍົກ ຂອງໄທ ເວລານັ້ນ) ແລະ ພວກປະຕິການພາກໃຕ້ຫວຽດນາມ. ເພື່ອຕ້ານກຳລັງປະຕິວັດ, ຕ້ານ ຄະນະລັດຖະປະຫານ ແລະ ມ້າງເພການເຈລະຈາ ລະຫ່ວາງລັດຖະບານລາຊາອານາຈັກ ສຸວັນນະພູມມາ ກັບຝ່າຍແນວລາວຮັກຊາດ.



ພາຫະນະຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວທຳລາຍ



ອາວຸດສົງຄາມຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວຢຶດໄດ້

ເພື່ອກະກຽມໃຫ້ແກ່ການບຸກຕີ ເຂົ້າຢຶດເອົາ ນະຄອນຫລວງວຽງຈັນ. ທ້າຍເດືອນ ພະຈິກ ຕາມຄຳສັ່ງຂອງອາເມລິກາ ພູມີ ໜໍ່ສະຫວັນ ກໍເຕົ້າໂຮມກຳລັງ ເຊິ່ງປະກອບດ້ວຍທະຫານ 6 ກອງພັນ.1 ກອງພັນປືນໃຫຍ່,1 ກອງຮ້ອຍລົດຫຸ້ມເກາະ, 1 ກອງຮ້ອຍຊ່າງແສງ ໄດ້ເປີດບັ້ນຮົບ ບຸກຕີກຳລັງຂອງຄະນະລັດຖະປະຫານ ແລະ ກຳລັງຂອງຝ່າຍປະເທດລາວ ຕາມສາຍທາງເລກ ທີ 13 ໃຕ້ ຢູ່ບ້ານ ສອດ; ປາກກະດິງ. ການສູ້ຮົບໄດ້ດຳເນີນໄປເຖິງ ວັນທີ 5 ທັນວາ ປີ 1960. ທະຫານ ພູມີ ໜໍ່ສະຫວັນ ຈຶ່ງສາມາດຕີຢຶດເອົາປ້ອມໝັ້ນປາກກະດິງໄດ້. ກຳລັງຂອງຄະນະລັດ ຖະປະຫານ ຈຶ່ງໄດ້ຖອນກັບມາຕັ້ງທີ່ໝັ້ນຕໍ່ສູ້ຢູ່ປາກຊັນ.



ກອງກຳລັງຂອງ ບຸນອູ້ມ ແລະ ພູມີ ໜໍ່ສະຫວັນ

◆ **ເຫດການລັດຖະປະຫານ:**

ພາຍຫລັງກອງປະຊຸມ ຄະນະບໍລິ ຫານງານສູນກາງພັກຄັ້ງທີ4 ເດືອນມິຖຸນາ ປີ 1960 ສຳເລັດລົງ ໄດ້ສິ່ງຜົນສະທ້ອນຢ່າງແຮງ ເຂົ້າໃນຊັ້ນຄົນຕ່າງໆ ຢູ່ໃນຕົວເມືອງ ກໍຄືຊົນນະບົດ ເປັນຕົ້ນ ແມ່ນຜູ້ຊົງຄຸນວຸດທິ, ປັນຍາຊົນ, ທະຫານ, ຕຳຫລວດ ຂອງລາຊະອານາຈັກລາວຢູ່ນະຄອນຫຼວງວຽງຈັນ ໄດ້ລຸກຂຶ້ນເປັນຂະບວນຕໍ່ສູ້ ຕ້ານຈັກກະພັດອາເມລິກາ ຜູ້ຮຸກຮານ ແລະ ສົມທົບກັບສະພາບຢູ່ ນະຄອນຫຼວງວຽງຈັນ ເວລານັ້ນ ໄດ້ເປັນກະແສຟອງປະຕິວັດບຸກສັດຕູຢ່າງຕໍ່ເນື່ອງ ຈາກນັ້ນ ຈົ່ງພາໄປເຖິງ ວັນທີ 9 ສິງຫາ ປີ 1960 (ປະມານ 3 ໂມງເຊົ້າ) ກອງພັນນ້ອຍທະຫານລາບອາກາດ ທີ 2 ຂອງກອງທັບລາຊະອານາຈັກລາວ ໂດຍມີພາກສ່ວນໜຶ່ງຂອງກຳລັງຕຳຫລວດເຂົ້າຮ່ວມ. ຊຶ່ງບັນຊາໂດຍ ຮ້ອຍເອກ ກອງແລ, ຮ້ອຍໂທ ເດືອນ ສູນນະ ລາດ, ຮ້ອຍຕີ ທຽບ ສິດທິເດດ ໄດ້ລຸກຂຶ້ນເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານ ສົມສະໜິດ - ພູມີໜໍ່ສະຫວັນ ຢູ່ນະຄອນຫລວງວຽງຈັນ ກຳລັງລັດຖະປະຫານ ໄດ້ອອກຖະແຫລງການນະໂຍບາຍ " ຕ້ານການແຊກແຊງຂອງອາເມລິກາ, ຢຸດຕິສົງຄາມການເມືອງ, ຟື້ນຟູສັນຕິພາບປອງດອງຊາດ, ເຈລະຈາກັບຝ່າຍປະເທດລາວ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ຂັບໄລ່ຈັກກະພັດອາເມລິກາ ຜູ້ຮຸກຮານອອກຈາກລາວ ". ການລັດຖະປະຫານຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກຊາວໜຸ່ມນັກຮຽນ, ນັກສຶກສາ ແລະ ປະຊາຊົນ ນະຄອນຫລວງວຽງຈັນ.

ມາຮອດວັນທີ 13 ສິງຫາ ປີ 1960 ໂດຍພາຍໃຕ້ການຊີ້ນຳຂອງສູນກາງພັກ. ຄະນະພັກ ແຂວງ ນະຄອນຫລວງວຽງຈັນ ໄດ້ປຸກລະດົມຊາວນະຄອນຫລວງວຽງຈັນ ຫລາຍໝື່ນຄົນ ລຸກຮື້ຂຶ້ນຕໍ່ສູ້ການເມືອງ, ການທະຫານ. ກຳລັງການເມືອງຂອງທຸກຊັ້ນຄົນ ໄດ້ແຫ່ຂະບວນຕາມຖະໜົນ, ຫົນທາງ ແລະ ມາໂຮມຊຸມນຸມກັນຢູ່ຕໍ່ໜ້າສຳນັກງານສະພາຜູ້ແທນລາດສະດອນ ເພື່ອສະໜັບສະໜູນ ຄະນະລັດຖະປະຫານ ທວງໃຫ້ຈັດຕັ້ງ ຄະນະລັດຖະບານຊຸດໃໝ່ ທີ່ເດີນຕາມເສັ້ນທາງສັນຕິພາບເປັນກາງ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ ວັນທີ 17 ສິງຫາ ປີ 1960, ລັດຖະບານຊຸດໃໝ່ ໄດ້ຮັບການສ້າງຕັ້ງຂຶ້ນໂດຍແມ່ນ ເຈົ້າ ສຸວັນນະພູມມາ ເປັນນາຍົກລັດຖະມົນຕີ. ລັດຖະບານນີ້ ໄດ້ມີການຮັບຮອງຈາກສະພາຜູ້ແທນລາດສະດອນ.



ທະຫານກອງພັນນ້ອຍ ທະຫານລາບອາກາດທີ່ 2

ລັດຖະບານຊຸດໃໝ່ ໄດ້ປະກາດສືບຕໍ່ປະຕິບັດນະໂຍບາຍສັນຕິພາບເປັນກາງ ແລະ ຄວາມຖືກຕ້ອງປອງດອງຊາດ.



ຂ້າລະຊະການ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ທີ່ວຽງຈັນ
ເດີນຂະບວນສະໜັບສະໜູນ ຄະນະລັດຖະປະຫານ 9.8.1960.

ວັນທີ 1 ເດືອນ ກັນຍາ ປີ 1960 ຢູ່ທີ່ນະຄອນຫລວງວຽງຈັນ, ປະຊາຊົນຜູ້ອອກແຮງງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ພະສົງສຳມະເນນ, ຜູ້ຊົງຄຸນວຸດທິຈຳນວນ 3000 ຄົນ, ຈັດຕັ້ງໂຮມຊຸມນຸມມິດຕິງຄັດຄ້ານ ແລະ ປະທ້ວງລັດຖະບານຊຸດໃໝ່ ທີ່ຮັບເອົາກຸ່ມ ພູມີ ໜໍ່ສະຫວັນ ເຂົ້າຢູ່ໃນຄະນະລັດຖະບານ.

ວັນທີ 13 ເດືອນ ກັນຍາ ປີ 1960 ປະຊາຊົນຊັ້ນຄົນຕ່າງໆ ໃນນະຄອນຫລວງວຽງຈັນ ກ່ວາສາມໝື່ນຄົນ ໂຮມຊຸມນຸມມິດຕິງ ສະໜັບສະໜູນແນວທາງສັນຕິພາບເປັນກາງ ແລະ ປອງດອງຊາດ ຂອງລັດຖະບານລາຊະອານາຈັກລາວ ແລະ ຄະນະລັດຖະປະຫານ, ຄັດຄ້ານພວກປະຕິການ ພູມີ ໜໍ່ສະຫວັນ.

ວັນທີ 1 ເດືອນ ທັນວາ ປີ 1960 ຊາວໜຸ່ມນະຄອນຫລວງວຽງຈັນ ກ່ວາ 300 ຄົນ ຈັດຕັ້ງການປະທ້ວງຢູ່ຕໍ່ໜ້າສະພາຜູ້ແທນລາສະດອນ ຄັດຄ້ານການອະນຸຍາດໃຫ້ພວກກະບົດ ພູມີໜໍ່ສະຫວັນ ແລະ ບຸນອຸ້ມ ເຂົ້າຮ່ວມລັດຖະບານ.

- ການຕໍ່ສູ້ດ້ວຍກຳລັງອາວຸດ.

ໂດຍປະຕິບັດຕາມທິດທາງຫັນທິດຕໍ່ສູ້ດ້ວຍກຳລັງອາວຸດ ສົມທົບກັບການຕໍ່ສູ້ການເມືອງຂອງສູນກາງພັກນັ້ນ ມາຮອດປີ 1960 ການຕໍ່ສູ້ດ້ວຍສົງຄາມກອງທລອນ ໄດ້ລະເບີດຂຶ້ນໃນ


ທົ່ວແຂວງ ນັບແຕ່ທົ່ງພຽງຮອດພູດອຍ, ກຳລັງດັ່ງກ່າວ ໄດ້ອອກແຮງສະກັດລັດຕິກຳລັງຂອງສັດຕູ ທີ່ອອກເຄື່ອນໄຫວກວາດລ້າງ ແລະ ເຄື່ອນໄຫວໄປມາດ້ວຍລົດ,ເຮືອ ແລະ ທາງຍ່າງ ຢູ່ພາຍໃນແຂວງຢ່າງຕັ້ງໜ້າ ອັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ຝ່າຍສັດຕູຢ່າງໜວງໜາຍ.

ບັ້ນຮົບຕໍ່ສູ້ຕ້ານການບຸກໂຈມຕີຂອງພູມີໜໍ່ສະຫວັນ.

ໃນເມື່ອ ນະຄອນຫລວງວຽງຈັນ ຕົກຢູ່ໃນກຳມືຂອງ ຄະນະລັດຖະປະຫານ ແລະ ລັດຖະບານ ສຸວັນນະພູມາ ທີ່ຮ່ວມກັບກຳລັງແນວລາວຮັກຊາດແລ້ວ. ພວກພູມມີ ໜໍ່ສະຫວັນ ໄດ້ລວມຫົວກັບ ບຸນອຸ້ມ ນະຈຳປາສັກ ຈັດຕັ້ງຄະນະປະຕິວັດ ແລະ ລັດຖະບານທ້ອງຖິ່ນຕາງໜ້າຂຶ້ນທີ່ແຂວງ ສະຫວັນນະເຂດ ໂດຍແມ່ນ ບຸນອຸ້ມ ເປັນນາຍົກລັດຖະມົນຕີ ແລະ ພູມີໜໍ່ ສະຫວັນ ເປັນຮອງ. ລັດຖະບານປະຕິການຂອງ ພູມີ ໜໍ່ສະຫວັນ - ບຸນອຸ້ມ ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອ ຈາກຈັກກະພັດອາເມລິກາ ແລະ ລັດຖະບານ ສະຫລິດທະນະລັດ (ນາຍົກ ຂອງໄທ ເວລານັ້ນ) ແລະ ພວກປະຕິການພາກໃຕ້ຫວຽດນາມ. ເພື່ອຕ້ານກຳລັງປະຕິວັດ, ຕ້ານ ຄະນະລັດຖະປະຫານ ແລະ ມ້າງເພການເຈລະຈາ ລະຫ່ວ່າງລັດຖະບານລາຊາອານາຈັກ ສຸວັນ ນະພູມມາ ກັບຝ່າຍແນວລາວຮັກຊາດ.



ພາຫະນະຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວທຳລາຍ



ອາວຸດສົງຄາມຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວຍຶດໄດ້

ເພື່ອກະກຽມໃຫ້ແກ່ການບຸກຕີ ເຂົ້າຍຶດເອົາ ນະຄອນຫລວງວຽງຈັນ. ທ້າຍເດືອນ ພະຈິກ ຕາມຄຳສັ່ງຂອງອາເມລິກາ ພູມີ ໜໍ່ສະຫວັນ ກໍເຕົ້າໂຮມກຳລັງ ເຊິ່ງປະກອບດ້ວຍທະຫານ 6 ກອງພັນ.1 ກອງພັນປືນໃຫຍ່,1 ກອງຮ້ອຍລົດຫຸ້ມເກາະ, 1 ກອງຮ້ອຍຊ່າງແສງ ໄດ້ເປີດບັ້ນຮົບ ບຸກຕີກຳລັງຂອງຄະນະລັດຖະປະຫານ ແລະ ກຳລັງຂອງຝ່າຍປະເທດລາວ ຕາມສາຍທາງເລກ ທີ 13 ໃຕ້ ຢູ່ບ້ານ ສອດ; ປາກກະດິ່ງ. ການສູ້ຮົບໄດ້ດຳເນີນໄປເຖິງ ວັນທີ 5 ທັນວາ ປີ 1960. ທະຫານ ພູມີ ໜໍ່ສະຫວັນ ຈຶ່ງສາມາດຕີຍຶດເອົາປ້ອມໜັ້ນປາກກະດິ່ງໄດ້. ກຳລັງຂອງຄະນະລັດ ຖະປະຫານ ຈຶ່ງໄດ້ຖອນກັບມາຕັ້ງທີ່ໝັ້ນຕໍ່ສູ້ຢູ່ປາກຊັນ.



ກອງກຳລັງຂອງ ບຸນອູ້ມ ແລະ ພູມີ ໜໍ່ສະຫວັນ

◆ **ເຫດການລັດຖະປະຫານ:**

ພາຍຫລັງກອງປະຊຸມ ຄະນະບໍລິ ຫານງານສູນກາງພັກຄັ້ງທີ4 ເດືອນມິຖຸນາ ປີ 1960 ສຳເລັດລົງ ໄດ້ສົ່ງຜົນສະທ້ອນຢ່າງແຮງ ເຂົ້າໃນຊັ້ນຄົນຕ່າງໆ ຢູ່ໃນຕົວເມືອງ ກໍຄືຊົນນະບົດ ເປັນຕົ້ນ ແມ່ນຜູ້ຊົງຄຸນວຸດທິ, ປັນຍາຊົນ, ທະຫານ, ຕຳຫລວດ ຂອງລາຊະອານາຈັກລາວຢູ່ນະຄອນຫຼວງວຽງຈັນ ໄດ້ລຸກຂຶ້ນເປັນຂະບວນຕໍ່ສູ້ ຕ້ານຈັກກະພັດອາເມລິກາ ຜູ້ຮຸກຮານ ແລະ ສົມທົບກັບສະພາບຢູ່ ນະຄອນຫຼວງວຽງຈັນ ເວລານັ້ນ ໄດ້ເປັນກະແສຟອງປະຕິວັດບຸກສັດຕູຢ່າງຕໍ່ເນື່ອງ ຈາກນັ້ນ ຈົ່ງພາໄປເຖິງ ວັນທີ 9 ສິງຫາ ປີ 1960 (ປະມານ 3 ໂມງເຊົ້າ) ກອງພັນນ້ອຍທະຫານລາບອາກາດ ທີ 2 ຂອງກອງທັບລາຊະອານາຈັກລາວ ໂດຍມີພາກສ່ວນໜຶ່ງຂອງກຳລັງຕຳຫລວດເຂົ້າຮ່ວມ. ຊຶ່ງບັນຊາໂດຍ ຮ້ອຍເອກ ກອງແລ, ຮ້ອຍໂທ ເດືອນ ສູນນະ ລາດ, ຮ້ອຍຕີ ທຽບ ສິດທິເດດ ໄດ້ລຸກຂຶ້ນເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານ ສົມສະໜິດ - ພູມີໜໍ່ສະຫວັນ ຢູ່ນະຄອນຫລວງວຽງຈັນ ກຳລັງລັດຖະປະຫານ ໄດ້ອອກຖະແຫລງການນະໂຍບາຍ " ຕ້ານການແຊກແຊງຂອງອາເມລິກາ, ຢຸດຕິສົງຄາມການເມືອງ, ຟື້ນຟູສັນຕິພາບປອງດອງຊາດ, ເຈລະຈາກັບຝ່າຍປະເທດລາວ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ຂັບໄລ່ຈັກກະພັດອາເມລິກາ ຜູ້ຮຸກຮານອອກຈາກລາວ ". ການລັດຖະປະຫານຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກຊາວໜຸ່ມນັກຮຽນ, ນັກສຶກສາ ແລະ ປະຊາຊົນ ນະຄອນຫລວງວຽງຈັນ.

ມາຮອດວັນທີ 13 ສິງຫາ ປີ 1960 ໂດຍພາຍໃຕ້ການຊີ້ນຳຂອງສູນກາງພັກ. ຄະນະພັກ ແຂວງ ນະຄອນຫລວງວຽງຈັນ ໄດ້ປຸກລະດົມຊາວນະຄອນຫລວງວຽງຈັນ ຫລາຍໝື່ນຄົນ ລຸກຮື້ຂຶ້ນຕໍ່ສູ້ການເມືອງ, ການທະຫານ. ກຳລັງການເມືອງຂອງທຸກຊັ້ນຄົນ ໄດ້ແຫ່ຂະບວນຕາມຖະໜົນ, ຫົນທາງ ແລະ ມາໂຮມຊຸມນຸມກັນຢູ່ຕໍ່ໜ້າສຳນັກງານສະພາຜູ້ແທນລາດສະດອນ ເພື່ອສະໜັບສະໜູນ ຄະນະລັດຖະປະຫານ ທວງໃຫ້ຈັດຕັ້ງ ຄະນະລັດຖະບານຊຸດໃໝ່ ທີ່ເດີນຕາມເສັ້ນທາງສັນຕິພາບເປັນກາງ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ ວັນທີ 17 ສິງຫາ ປີ 1960, ລັດຖະບານຊຸດໃໝ່ ໄດ້ຮັບການສ້າງຕັ້ງຂຶ້ນໂດຍແມ່ນ ເຈົ້າ ສຸວັນນະພູມມາ ເປັນນາຍົກລັດຖະມົນຕີ. ລັດຖະບານນີ້ ໄດ້ມີການຮັບຮອງຈາກສະພາຜູ້ແທນລາດສະດອນ.



ທະຫານກອງພັນນ້ອຍ ທະຫານລາບອາກາດທີ່ 2

ລັດຖະບານຊຸດໃໝ່ ໄດ້ປະກາດສືບຕໍ່ປະຕິບັດນະໂຍບາຍສັນຕິພາບເປັນກາງ ແລະ ຄວາມຖືກຕ້ອງປອງດອງຊາດ.



ຂ້າລະຊະການ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ທີ່ວຽງຈັນ
ເດີນຂະບວນສະໜັບສະໜູນ ຄະນະລັດຖະປະຫານ 9.8.1960.

ວັນທີ 1 ເດືອນ ກັນຍາ ປີ 1960 ຢູ່ທີ່ນະຄອນຫລວງວຽງຈັນ, ປະຊາຊົນຜູ້ອອກແຮງງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ພະສົງສຳມະເນນ, ຜູ້ຊົງຄຸນວຸດທິຈຳນວນ 3000 ຄົນ, ຈັດຕັ້ງໂຮມຊຸມນຸມມິດຕິງຄັດຄ້ານ ແລະ ປະທ້ວງລັດຖະບານຊຸດໃໝ່ ທີ່ຮັບເອົາກຸ່ມ ພູມີ ໜໍ່ສະຫວັນ ເຂົ້າຢູ່ໃນຄະນະລັດຖະບານ.

ວັນທີ 13 ເດືອນ ກັນຍາ ປີ 1960 ປະຊາຊົນຊັ້ນຄົນຕ່າງໆ ໃນນະຄອນຫລວງວຽງຈັນ ກວ່າສາມໝື່ນຄົນ ໂຮມຊຸມນຸມມິດຕິງ ສະໜັບສະໜູນແນວທາງສັນຕິພາບເປັນກາງ ແລະ ປອງດອງຊາດ ຂອງລັດຖະບານລາຊະອານາຈັກລາວ ແລະ ຄະນະລັດຖະປະຫານ, ຄັດຄ້ານພວກປະຕິການ ພູມີ ໜໍ່ສະຫວັນ.

ວັນທີ 1 ເດືອນ ທັນວາ ປີ 1960 ຊາວໜຸ່ມນະຄອນຫລວງວຽງຈັນ ກ່ວາ 300 ຄົນ ຈັດຕັ້ງການປະທ້ວງຢູ່ຕໍ່ໜ້າສະພາຜູ້ແທນລາສະດອນ ຄັດຄ້ານການອະນຸຍາດໃຫ້ພວກກະບົດ ພູມີໜໍ່ສະຫວັນ ແລະ ບຸນອຸ້ມ ເຂົ້າຮ່ວມລັດຖະບານ.


- ການຕໍ່ສູ້ດ້ວຍກຳລັງອາວຸດ.

ໂດຍປະຕິບັດຕາມທິດທາງຫັນທິດຕໍ່ສູ້ດ້ວຍກຳລັງອາວຸດ ສົມທົບກັບການຕໍ່ສູ້ການເມືອງຂອງສູນກາງພັກນັ້ນ ມາຮອດປີ 1960 ການຕໍ່ສູ້ດ້ວຍສົງຄາມກອງຫລອນ ໄດ້ລະເບີດຂຶ້ນໃນ


ທົ່ວແຂວງ ນັບແຕ່ທົ່ງພຽງຮອດພູດອຍ, ກຳລັງດັ່ງກ່າວ ໄດ້ອອກແຮງສະກັດລັດຕິກຳລັງຂອງສັດຕູ ທີ່ອອກເຄື່ອນໄຫວກວາດລ້າງ ແລະ ເຄື່ອນໄຫວໄປມາດ້ວຍລົດ,ເຮືອ ແລະ ທາງຍ່າງ ຢູ່ພາຍໃນແຂວງຢ່າງຕັ້ງໜ້າ ອັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ຝ່າຍສັດຕູຢ່າງໜວງໜາຍ.

ບັ້ນຮົບຕໍ່ສູ້ຕ້ານການບຸກໂຈມຕີຂອງພູມີໜໍ່ສະຫວັນ.

ໃນເມື່ອ ນະຄອນຫລວງວຽງຈັນ ຕົກຢູ່ໃນກຳມືຂອງ ຄະນະລັດຖະປະຫານ ແລະ ລັດຖະບານ ສຸວັນນະພູມາ ທີ່ຮ່ວມກັບກຳລັງແນວລາວຮັກຊາດແລ້ວ. ພວກພູມມີ ໜໍ່ສະຫວັນ ໄດ້ລວມຫົວກັບ ບຸນອູ້ມ ນະຈຳປາສັກ ຈັດຕັ້ງຄະນະປະຕິວັດ ແລະ ລັດຖະບານທ້ອງຖິ່ນຕາງໜ້າຂຶ້ນທີ່ແຂວງ ສະຫວັນນະເຂດ ໂດຍແມ່ນ ບຸນອຸ້ມ ເປັນນາຍົກລັດຖະມົນຕີ ແລະ ພູມີໜໍ່ ສະຫວັນ ເປັນຮອງ. ລັດຖະບານປະຕິການຂອງ ພູມີ ໜໍ່ສະຫວັນ - ບຸນອູ້ມ ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອ ຈາກຈັກກະພັດອາເມລິກາ ແລະ ລັດຖະບານ ສະຫລິດທະນະລັດ (ນາຍົກ ຂອງໄທ ເວລານັ້ນ) ແລະ ພວກປະຕິການພາກໃຕ້ຫວຽດນາມ. ເພື່ອຕ້ານກຳລັງປະຕິວັດ, ຕ້ານ ຄະນະລັດຖະປະຫານ ແລະ ມ້າງເພການເຈລະຈາ ລະຫ່ວ່າງລັດຖະບານລາຊາອານາຈັກ ສຸວັນ ນະພູມມາ ກັບຝ່າຍແນວລາວຮັກຊາດ.



ພາຫະນະຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວທຳລາຍ



ອາວຸດສົງຄາມຂອງອາເມລິກາ ທີ່ເອົາມາເຮັດສົງຄາມຢູ່ລາວ, ຖືກຝ່າຍກຳລັງປະຕິວັດລາວຢຶດໄດ້

ເພື່ອກະກຽມໃຫ້ແກ່ການບຸກຕີ ເຂົ້າຢຶດເອົາ ນະຄອນຫລວງວຽງຈັນ. ທ້າຍເດືອນ ພະຈິກ ຕາມຄຳສັ່ງຂອງອາເມລິກາ ພູມີ ໜໍ່ສະຫວັນ ກໍເຕົ້າໂຮມກຳລັງ ເຊິ່ງປະກອບດ້ວຍທະຫານ 6 ກອງພັນ.1 ກອງພັນປືນໃຫຍ່,1 ກອງຮ້ອຍລົດຫຸ້ມເກາະ, 1 ກອງຮ້ອຍຊ່າງແສງ ໄດ້ເປີດປັ້ນຮົບ ບຸກຕີກຳລັງຂອງຄະນະລັດຖະປະຫານ ແລະ ກຳລັງຂອງຝ່າຍປະເທດລາວ ຕາມສາຍທາງເລກ ທີ 13 ໃຕ້ ຢູ່ບ້ານ ສອດ; ປາກກະດິ່ງ. ການສູ້ຮົບໄດ້ດຳເນີນໄປເຖິງ ວັນທີ 5 ທັນວາ ປີ 1960. ທະຫານ ພູມີ ໜໍ່ສະຫວັນ ຈຶ່ງສາມາດຕີຢຶດເອົາປ້ອມໝັ້ນປາກກະດິ່ງໄດ້. ກຳລັງຂອງຄະນະລັດ ຖະປະຫານ ຈຶ່ງໄດ້ຖອນກັບມາຕັ້ງທີ່ໝັ້ນຕໍ່ສູ້ຢູ່ປາກຊັນ.



ກອງກຳລັງຂອງ ບຸນອູ້ມ ແລະ ພູມີ ໜໍ່ສະຫວັນ

ວັນທີ 8 ທັນວາ ປີ 1960 ພູມີ ໜໍ່ສະຫວັນ, ຈັກກະພັດອາເມລິກາ ໄດ້ຊຸກຍູ້ ກຸປະສິດອະໄພ ຜູ້ບັນຊາການທະຫານ ພາກທີ 5 ແລະ ສີໂທ ຊຶ່ງເປັນລູກມືຊັ້ນຈຳຂອງພວກເຂົາໄດ້ກໍ່ການກະບົດຂຶ້ນຢູ່ ນະຄອນຫລວງວຽງຈັນ. ເພື່ອສົມທົບກັບກຳລັງຂອງ ພູມີ ໜໍ່ສະຫວັນ ຢູ່ໜອງຄາຍ ປະເທດໄທ ກຸ່ມຈະບຸກຕີເຂົ້ານະຄອນຫລວງວຽງຈັນ. ແຕ່ຖືກກຳລັງຂອງແນວລາວຮັກຊາດ, ກຳລັງຂອງຄະນະລັດຖະປະຫານ ແລະ ຊາວນະຄອນຫລວງວຽງຈັນ ຕໍ່ຕ້ານຄືນຢ່າງແຂງແຮງ ເຮັດໃຫ້ທະຫານຂອງ ກຸປະສິດອະໄພ ຕ້ອງຖອນອອກຈາກໃຈກາງເມືອງວຽງຈັນ ໄປຈັ້ງທ່າຢູ່ ຄ້າຍຈີ່ນາຍໂມ້ ແລ້ວສືບຕໍ່ຍິງປືນໃຫຍ່ນາບຂູ່ຕົວເມືອງວຽງຈັນ ຕໍ່ໄປ.

ວັນທີ 13 ເດືອນ ທັນວາ ປີ 1960 ພວກ ພູມີ ໜໍ່ສະຫວັນ ໄດ້ນຳໃຊ້ກຳລັງຂະໜາດໃຫຍ່ ໂດຍໄດ້ຮັບການຊ່ວຍໜູນຈາກທະຫານໄທ ທັງດ້ານຈຳນວນພົນ ແລະ ອາວຸດຍຸດໂທປະກອນ ຢ່າງຫຼວງຫຼາຍ. ພວກເຂົາໃຊ້ກຳລັງທະຫານອາກາດ ໂດດຈ້ອງລົງເຂດບ້ານທ້ອມ, ທົ່ງນາ, ບ້ານ ໂຊກ ຢຶດເອົາດົງໂດກ, ສຳນັກຢູ່ເສດຫຼັກ 6 (Usiad) ສົມທົບກັບທະຫານລາບ ທີ່ຂວ້າມນ້ຳຂອງ ມາແຕ່ໜອງຄາຍ, ກຳລັງຂອງ ກຸປະສິດອະໄພ ຢູ່ຄ້າຍຈີ່ນາຍໂມ້, ລົດຕັງ - ລົດອາແອັມ, ເຮືອ ຮົບທີ່ແລ່ນລຽບຕາມຮີມແມ່ນ້ຳຂອງ, ກຳລັງໄຟປືນໃຫຍ່ບຸກຕີເຂົ້າ ນະຄອນຫລວງວຽງຈັນ ເທື່ອ ລະກ້າວ ການສູ້ຢັນກັນໄດ້ເປັນໄປຢ່າງດຸເດືອດ ລະຫວ່າງກຳລັງຮັກຊາດ ກັບກຳລັງພູມີ ໜໍ່ສະ ຫວັນ ອັນໄດ້ເຮັດໃຫ້ຕົວເມືອງວຽງຈັນ ຫລາຍບ່ອນຖືກລຸກໄໝ້ເປັນແປວໄຟ.



ກອງທັບປົດປ່ອຍປະຊາຊົນລາວ ບຸກຕີເຂົ້າເຂດກາສີ - ວັງວຽງ
ໃນລະຫວ່າງປີ 1960-1962

ເພື່ອປົກປັກຮັກສາ ນະຄອນຫລວງວຽງຈັນ, ກຳລັງປະກອບອາວຸດ ປະຕິວັດແນວລາວ ຮັກຊາດ ສົມທົບກັບກຳລັງລັດຖະປະຫານ ພ້ອມດ້ວຍຂະບວນນັກຮຽນ, ນັກສຶກສາ, ຊາວໜຸ່ມ ແລະ ມວນຊົນ ວຽງຈັນ ໄດ້ສູ້ຮົບຕ້ານທານຢ່າງອົງອາດກ້າຫານ ເພື່ອປ້ອງກັນຮັກສາ, ຍາດແຍ່ງ ເອົາແຕ່ລະເສັ້ນທາງ, ແຕ່ລະບ້ານດ້ວຍຄວາມເດັດດ່ຽວໝຸ່ງແໜ້ນ ແລະ ນ້ຳໃຈເສຍສະຫລະ ອັນອົງອາດກ້າແກ່ນ ເພື່ອປະເທດຊາດຂອງ ກອງທັບປະຕິວັດ ແລະ ຂອງຊາວ ນະຄອນຫລວງ ວຽງຈັນ.

ກ່ອນບັ້ນຮົບປ້ອງກັນຕົວເມືອງວຽງຈັນ ຈະເປີດຂຶ້ນ, ກຳລັງປະຕິວັດເຂດວຽງຈັນ, ໃຕ້ການ ຊີ້ນຳຂອງຄະນະພັກ ເຂດວຽງຈັນ ໂດຍມີ ສະຫາຍ ທິດມ່ວນ ສາວຈັນທະລາ ວ່າການເປັນເລ ຂາພັກແຂວງ ທັງເປັນປະທານປົກຄອງ ແຂວງ ວຽງຈັນ ຢູ່ເຂດທີ່ໝັ້ນ ລ້ອງຕອນ ເມືອງ ເຟືອງ ໄດ້ຮີບຮ້ອນຈັດຕັ້ງກອງກຳລັງປະກອບອາວຸດໜຶ່ງຂຶ້ນ ເຊິ່ງບັນຊາໂດຍ ສະຫາຍ ສີທອງ, ສະ ຫາຍ ຄຳພັນ ສີບົວລີພາ ແລະ ສະຫາຍ ທອງເດືອນ ຈັນທະລາ ເອີ້ນວ່າ: ກອງພັນ 500. ປະ ກອບມີ 4 ກອງຮ້ອຍ ທະຫານລາບ ປະສານສົມທົບກັບກຳລັງລັດຖະປະຫານ ແລະ ກຳລັງຂອງ ສູນກາງ ຊ່ວຍໜູນບຸກຕີເຂົ້າໃຈກາງ ນະຄອນຫລວງວຽງຈັນ ເພື່ອຊ່ວຍໜູນກຳລັງນັກຮຽນ, ນັກ ສຶກສາ ແລະ ປະຊາຊົນ ທີ່ພວມຕໍ່ສູ້ປ້ອງກັນບ້ານເຮືອນ ແລະ ຕົວເມືອງຂອງຕົນ.

ກຳລັງປະຕິວັດຂອງພວກເຮົາ ໄດ້ເຄື່ອນກຳລັງເຂົ້າບັນດາຈຸດສາຍທາງສຳຄັນ ຂອງຕົວ ເມືອງວຽງຈັນ; ກອງຮ້ອຍທີ 1, ທີ 2 ບັນຊາໂດຍ ສະຫາຍ ສີທອງ ໄດ້ບຸກຕີໄປຕາມສາຍທາງ ຫລວງພະບາງ ເຂົ້າໃຈກາງ ນະຄອນຫລວງ ແລ້ວໄປຕັ້ງຫລັກສະກັດຕີສັດຕູຢູ່ບໍລິເວນ ຫໍພະ ແກ້ວ, ວັດສີສະເກດ, ອີກກຳລັງໜຶ່ງ ມີກອງຮ້ອຍ 3 ບຸກຕີລຽບຕາມສາຍນ້ຳຂອງ, ກອງຮ້ອຍ 4 ບຸກຕີເຂົ້າທິດ ໜອງບົກ, ດົງໂດກ, ກອງຮ້ອຍນີ້ ຕີຢູ່ເຂດນອກສົມທົບກັບກຳລັງລັດຖະປະຫານ ເຊິ່ງບັນຊາໂດຍ ຮ້ອຍເອກ ກອງແລ, ຮ້ອຍໂທ ເດືອນ ສູນນະລາດ ແລະ ຮ້ອຍຕີ ທຽບ ລິດທິ ເດດ; ບັ້ນຮົບໄດ້ດຳເນີນໄປຢ່າງດຸເດືອດຂ້ຽວຂາດທີ່ສຸດ, ເຮັດໃຫ້ ນະຄອນຫລວງວຽງຈັນ ກາຍ ເປັນສະໜ່ລະພູມເລືອດ, ກຳລັງແຕ່ລະຝ່າຍຕ່າງກໍບຸກຕະລຸມບອນ ຊ້ອນແຂ້ວຫີວເຂົ້າໃສ່ກັນ. ແຕ່ຍ້ອນເຫລັກ ຫລາຍກວ່າຖ່ານ, ການຊັ່ງຊາກຳລັງໃນສະໜາມລົບ ມີການຜັນແປຢ່າງໄວວາ. ຝ່າຍກຳລັງ ພູມີ ໜໍ່ສະຫວັນ ໂດຍໄດ້ຮັບການຊ່ວຍໜູນ ຈາກອາເມລິກາ ໄດ້ບຸກຕີເຂົ້າຢຶດເອົາ ນະຄອນຫລວງວຽງຈັນ ຢ່າງປວງບ້າ. ການສູ້ຍັນກັນໄດ້ແກ່ຍາວເປັນເວລາ 4 ວັນ 4 ຄືນ, ສະ ຫາຍ ສີທອງ ຜູ້ບັນຊາກອງພັນ 500 ໄດ້ບັນຊາກຳລັງ ຕີສັດຕູຢ່າງອົງອາດກ້າແກ່ນ, ສະຫາຍໄດ້ ເສຍສະຫລະຊີວິດໃນ ສະໜາມລົບ ປະເຊີນໜ້າກັບສັດຕູຢູ່ຂ້າງ ຫໍພະແກ້ວ ແລະ ວັດສີສະເກດ ຢ່າງພິລະອາດຫານ.



ທ່ານ ສີທອງ ບັນຊາທະຫານສູ້ຮົບ



ສະພາບການສູ້ຮົບໄດ້ຜັນແປໄປຢ່າງດຸເດືອດ ເພື່ອຈຳກັດການເສຍຫາຍ ຂອງນະຄອນຫລວງ ວຽງຈັນ ແລະ ເພື່ອຮັກສາກຳລັງສູ້ຮົບ, ເສນາທິການດ່ານຮົບເຂດວຽງຈັນ ໄດ້ມີຄຳສັ່ງໃຫ້ ກອງພັນ 500 ຂອງຝ່າຍແນວລາວຮັກຊາດ ຖອນກຳລັງອອກຈາກສະໜາມຮົບເມືອງວຽງຈັນ ໃນຄືນ ຂອງວັນທີ 16 ທັນວາ ປີ 1960 ແລ້ວມຸ່ງໜ້າຂຶ້ນໄປຕາມສາຍທາງ 13 ເໜືອໄປຢຶດເອົາ ວັງວຽງ ກາສີ, ສາລາພູຄູນ ສົມທົບກັບກຳລັງຂອງສູນກາງ ຕີຢຶດເອົາເມືອງສຸຍ ກ້າວຂຶ້ນປິດປ່ອຍ ທົ່ງໄຫຫີນຊ່ຽງຂວາງ ໃນວັນທີ 1/11/1960 ເພື່ອປັບປຸງກຳລັງ ແລະ ສ້າງຖານທີ່ໝັ້ນຕໍ່ຕ້ານຍາວ ນານ. ໃນບັ້ນຮົບຄັ້ງນີ້, ພວກເຮົາສາມາດດັບສູນກຳລັງສັດຕູໄດ້ 400 ກວ່ານັກ ແລະ ຈັບເປັນ ສະເລັຍເສິກໄດ້ 100 ກວ່າຄົນ.


ຢູ່ນະຄອນຫລວງວຽງຈັນ, ພາຍຫລັງບັ້ນບຸກຕີຂອງກຸ່ມກະບົດ ພູມີ ໜໍ່ສະຫວັນ ໄດ້ເປັນ ເຈົ້າການຄວບຄຸມ ຕົວເມືອງວຽງຈັນ ໄດ້ໄລຍະໜຶ່ງ. ກຳລັງຝ່າຍປະເທດລາວ ແລະ ກຳລັງລັດ ຖະປະຫານໄດ້ຖອນອອກຈາກນະຄອນຫລວງວຽງຈັນ. ນະຄອນຫລວງວຽງຈັນ ໄດ້ຕົກຢູ່ໃນກຳ ມືຂອງ ພູມີ ໜໍ່ສະຫວັນ ລູກມືຂອງຈັກກະພັດອາເມລິກາແລ້ວ. ນະຄອນຫລວງວຽງຈັນ ໄດ້ຖືກ ຢຶດຄອງຊົ່ວຄາວຂອງສັດຕູ. ຄະນະພັກແຂວງ ນະຄອນຫລວງວຽງຈັນ ໄດ້ອອກແຮງຊີ້ນຳປຸກລະ ດົມຂົນຂວາຍປະຊາຊົນ, ນັກຮຽນ, ນັກສຶກສາປັນຍາຊົນ, ພະສົງສຳມະເນນ, ຜູ້ຊົງຄຸນວຸດທິ ກໍຄື ຊັ້ນຄົນຕ່າງໆ ຢູ່ພາຍໃນ ນະຄອນຫລວງວຽງຈັນ ແລະ ເມືອງຕ່າງໆ ທີ່ຢູ່ໃກ້ຄຽງໃຫ້ເຫັນໄດ້ເຈດ ຈຳນົງອັນຊົ່ວຊ້າຂອງຈັກກະພັດອາເມລິກາ ແລະ ລູກມືທີ່ໄດ້ກຸກຄາມໂຄ່ນລົ້ມ ລັດຖະບານປະສົມ ແຫ່ງຊາດ ຄັ້ງທີ I ໃຊ້ກຳລັງທະຫານປາບປາມກຳລັງປະຕິວັດ ແລະ ຈັບບັນດາຜູ້ນຳຂອງແນວ ລາວຮັກຊາດ. ຜ່ານຂະບວນການທັງຕໍ່ສູ້ດ້ວຍກຳລັງອາວຸດ ແລະ ການຕໍ່ສູ້ການເມືອງ. ການປຸກ ລະດົມຂົນຂວາຍຂອງຄະນະພັກ ນະຄອນຫລວງວຽງຈັນ ແລະ ເມືອງຕ່າງໆ ຢູ່ໃນນະຄອນ ຫລວງວຽງຈັນ ກໍຄືຢູ່ບັນດາຕົວເມືອງໃກ້ຄຽງ ໄດ້ມີຄວາມຕື່ນຕົວເຂົ້າຮ່ວມຂະບວນການປະຕິ ວັດ ນັບວັນນັບໜາແໜ້ນຂຶ້ນ ແລະ ໄດ້ເຕົ້າໂຮມກຳລັງສາມັກຄີກັນຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອ ພາລະກິດປະຕິວັດ ອັນຍາວນານຂອງປະເທດຊາດ.

*** ຜົນງານການປະກອບສ່ວນ ທາງດ້ານຊັບສິນຂອງ ປະຊາຊົນບັນດາເຜົ່າ ນະຄອນຫຼວງ ວຽງຈັນ ເຂົ້າໃນບັ້ນຕໍ່ສູ້ຕ້ານການທຳລາຍຂອງຈັກກະພັດ (1954 -1960).**

ນອກຈາກການປະກອບສ່ວນທາງດ້ານການເມືອງ ແລະ ການທະຫານ ແລ້ວປະຊາຊົນ ບັນດາເຜົ່າ ຕະຫລອດຮອດພະສົງສຳ ມະເນນ ຂອງແຂວງ ນະຄອນຫລວງວຽງຈັນ ຍັງໄດ້ປະ ກອບສ່ວນທາງດ້ານເສດຖະກິດ ຢ່າງຫລວງຫລາຍ ເຂົ້າໃນຂະບວນການຕໍ່ສູ້ທີ່ດຸເດືອດ ແລະ ມີ

ໄຊອັນຍິ່ງໃຫຍ່ໃນຄັ້ງນີ້ ເປັນຕົ້ນ ແມ່ນການປະກອບສ່ວນເຂົ້າປາອາຫານ, ເງິນຄໍາ, ຢາປົວພະຍາດ ແລະ ທີ່ພັກອາໄສ ໃຫ້ແກ່ພະນັກງານປະຕິວັດ ເດັ່ນກວ່າໝູ່ແມ່ນເປັນກໍາລັງຮັກສາຄວາມປອດໄພ ໃຫ້ແກ່ບັນດາຜູ້ນໍາຂອງພັກ ແລະ ພະນັກງານຂອງແນວລາວຮັກຊາດ ທີ່ແຫກຄຸກອອກຈາກຄ້າຍຂັງ ໂພນເຄັງ ນະຄອນຫລວງວຽງຈັນ ໃນວັນທີ 23 ພຶດສະພາ ປີ 1960 ເຖິງເດືອນ ກໍລະກົດ ປີ 1960 ຂະບວນຜູ້ນໍາທີ່ເດີນທາງໄປຮອດບ້ານໃດ ປະຊາຊົນບ້ານນັ້ນກໍໄດ້ສາມັກຄີກັນເປັນກໍາລັງປ້ອງກັນເວນຍາມ, ເບິ່ງແຍງທາງດ້ານການກິນຢູ່ພັກເຊົາເປັນຢ່າງດີ. ຮັກສາຄວາມລັບ, ຮັກສາຄວາມປອດໄພ ອັນໄດ້ເຮັດໃຫ້ບັນດາຜູ້ນໍາຂອງພັກ ແລະ ພະນັກງານຂອງແນວລາວຮັກຊາດ ເດີນທາງໄປເຖິງເຂດທີ່ໝັ້ນ ຂອງການປະຕິວັດ (ແຂວງ ຫົວພັນ) ມີຄວາມປອດໄພທຸກປະການ. ພິເສດເວລາກອງທັບ, ຜູ້ນໍາໄປພັກເຊົາຢູ່ ບ້ານ ບວກ, ຖໍ້າແກ້ວ ເມືອງ ກາສີ 20 ກວ່າມື້ (ແຕ່ທ້າຍເດືອນ ກໍລະກົດ ຫາຕົ້ນ ເດືອນ ສິງຫາ ປີ 1960) ປະຊາຊົນ ເຂດທີ່ໝັ້ນປະຕິວັດໃນສອງບ້ານດັ່ງກ່າວນີ້ ພ້ອມກັນປະກອບສ່ວນດ້ານວັດຖຸສິ່ງຂອງມີຄວາຍ 3 ໂຕ, ເຂົ້າເປືອກ 2 ໂຕນກວ່າ ແລະ ອື່ນໆ... ການປະກອບສ່ວນດັ່ງກ່າວ ໂດຍບໍ່ໄດ້ຮຽກຮ້ອງຄຸນຄ່າຕອບແທນແຕ່ຢ່າງໃດ ແມ່ນສະແດງເຖິງນໍ້າໃຈຮັກຊາດຮັກຜູ້ນໍາຂອງຕົນ, ສາມັກຄີກັນລຸກຂຶ້ນຕໍ່ສູ້ ພາຍໃຕ້ການນໍາພາຂອງພັກ.





ປະຊາຊົນຕົວເມືອງຕ່າງໆ ເດີນຂະບວນຂັດຄ້ານອາເມລິກາ ທີ່ມີກົນອຸບາຍຮຸກຮານລາວ ປີ 1961



ກອງປະຊຸມປະສົມສາມຝ່າຍ ຢູ່ບ້ານ ນາມອນ (ວັງວຽງ) ເພື່ອນສ້າງຄວາມປອງດອງຊາດ 11/5/1961

ຜົນງານການຕໍ່ສູ້ປະຕິວັດຂອງພະນັກງານ, ສະມາຊິກພັກ, ປະຊາຊົນບັນດາເຜົ່າ ຂອງ ແຂວງນະຄອນຫລວງວຽງຈັນ ໄດ້ປະກອບສ່ວນໂດຍກົງ ເຂົ້າໃນການເຮັດໃຫ້ຝ່າຍລາຊະອານາ ຈັກ ວຽງຈັນ ຍອມເຂົ້າຮ່ວມກອງປະຊຸມສາກົນກ່ຽວກັບລາວ ໄດ້ໄຂຂຶ້ນທີ່ເຊີແນວ (ປະເທດສະ ວິສ) ໃນວັນທີ 16 ພຶດສະພາ ປີ 1961 ແລະ ກ້າວໄປເຖິງຍອມເຊັນສັນຍາ ສ້າງຄວາມຖືກຕ້ອງ

ປອງດອງຊາດຄືນໃໝ່ ໃນວັນທີ 23 ກໍລະກົດ ປີ 1962, ຮັບຮູ້ຄວາມເປັນເອກະລາດ, ເປັນກາງ, ເອກະພາບ, ອະທິປະໄຕ ແລະ ຜືນແຜນດິນອັນຄົບຖ້ວນຂອງລາວ, ຮັບຮູ້ລັດຖະບານປະສົມແຫ່ງຊາດ ທີ່ໄດ້ສ້າງຕັ້ງຂຶ້ນ ໃນວັນທີ 12 ມິຖຸນາ ປີ 1962 ຕາມການຕົກລົງຂອງກອງປະຊຸມສາມຝ່າຍ ຄື: ຝ່າຍປະເທດລາວ, ຝ່າຍເປັນກາງ ແລະ ຝ່າຍລາຊະອານາຈັກວຽງຈັນ ໂດຍເຈົ້າສຸວັນນະພູມມາ ເປັນນາຍົກລັດຖະມົນຕີ.

ກອງປະຊຸມພະນັກງານຂອງແຂວງ ນະຄອນຫຼວງວຽງຈັນ ຄັ້ງປະຖົມມະລຶກໄດ້ຈັດຂຶ້ນ ວັນທີ 7 ເດືອນ 1 ປີ 1962❶ ກອງປະຊຸມໄດ້ຮັບຟັງ ສະຫາຍ ທິດເຄນ (ພໍ່ສະແຫວງ) ສະເໜີ ຜ່ານບົດລາຍງານການເມືອງ ການນຳພາຂອງອົງຄະນະພັກ ແຂວງ ນະຄອນຫລວງວຽງຈັນ ໃນການຈັດຕັ້ງ ນຳພາປະຕິບັດແນວທາງລວມຂອງ ສູນກາງພັກ ກໍຄືໜ້າທີ່ທິດທາງຂອງຄະນະພັກ ແຂວງ ນະຄອນຫຼວງວຽງຈັນ ຊຸດທຳອິດວາງອອກຢູ່ໃນໄລຍະຕໍ່ສູ້ ໃຫ້ມີການປະຕິບັດສັນຍາເຊີແນວ ປີ 1954 ແລະ ປົກປັກຮັກສາ 2 ແຂວງ ເຕົ້າໂຮມແຕ່ ປີ 1955 -1958 ກໍຄືໄລຍະຫັນທິດຕໍ່ສູ້ ແລະ ຕີເອົາຊະນະສົງຄາມພິເສດ ຂອງຈັກກະພັດອາເມລິກາ ແຕ່ປີ 1959 ຜ່ານມາ ໃນນີ້ ບົດລາຍງານການເມືອງ ໄດ້ຊີ້ໃຫ້ເຫັນການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປະຕິວັດ, ຜົນງານອັນໃຫ່ຍຫລວງ ໃນການໂຄສະນາປຸກລະດົມ ຂົນຂວາຍປະຊາຊົນຕໍ່ສູ້ ທາງດ້ານການເມືອງ ແລະ ວິລະກຳອັນລ້ຳເລີດຂອງກຳລັງປະກອບອາວຸດ ແລະ ປະຊາຊົນຊາວນະຄອນຫຼວງວຽງຈັນ ຍາດ ມາໄດ້ໃນນີ້ ເດັ່ນກວ່າໝູ່ນັ້ນແມ່ນ:


ການຕໍ່ສູ້ທາງດ້ານການເມືອງ ແລະ ເພື່ອປົກປ້ອງຜູ້ນຳໃນເວລາຖືກຄຸມຂັງຢູ່ຄຸກໂພນເຄັງ ໃຫ້ຫລຸດພົ້ນອອກຈາກການທຳຮ້າຍຕາມແຜນຂອງສັດຕູ, ຈົນສາມາດຍາດໄດ້ຄວາມເຫັນພ້ອມເປັນໃຈຂອງກຳລັງສາລະວັດທະຫານ ຝ່າຍວຽງຈັນ ທີ່ຕື່ນຕົວຮັກຊາດສົມທົບກັບກຳລັງປະຕິວັດ ພາຜູ້ນຳຂອງພັກ ພະນັກງານຂອງແນວລາວຮັກຊາດແຫກຄຸກໂພນເຄັງ ອອກໄປສູ່ເຂດທີ່ໝັ້ນຂອງການປະຕິວັດດ້ວຍຄວາມປອດໄພຢ່າງມະຫັດສະຈັນ ເຊິ່ງບໍ່ເຄີຍມີໃນປະຫວັດສາດ.

ກອງກຳລັງປະກອບອາວຸດ ແລະ ປະຊາຊົນເຮົາ ໄດ້ຕີຕ້ານການບຸກລຸກຂອງພວກ ພູມີໜ່ສະຫວັນ ເຂົ້າໃນຕົວເມືອງນະຄອນຫຼວງວຽງຈັນ ຄັ້ງວັນທີ 13/12 ປີ 1960 ຢ່າງອົງອາດກ້າຫານ ເຖິງແມ່ນວ່າສັດຕູຈະມີກຳລັງ ແລະ ອາວຸດຍຸດໂທປະກອນເໜືອກວ່າ ແຕ່ນັກຮົບຂອງພວກເຮົາກໍບໍ່ໄດ້ຫວັ່ນໄຫວຢ້ານກົວ, ຍອມອຸທິດຊີວິດເລືອດເນື້ອຕໍ່ສູ້, ໃນນັ້ນມີສະຫາຍ ສີທອງ ຫົວໜ້າກອງ ພັນ 500 ໄດ້ຍອມເສຍສະຫຼະຢ່າງພິລະອາດຫານ ຊຶ່ງໄດ້ກາຍເປັນມູນເຊື້ອ ແລະ ແບບຢ່າງອັນດີງາມ ໃຫ້ແກ່ອະນຸຊົນນະຄອນຫຼວງວຽງຈັນ ກໍຄືທົ່ວປະເທດ. ສູນກາງພັກ ແລະ

---

(1). ກອງປະຊຸມພະນັກງານແຂວງນະຄອນຫລວງວຽງຈັນ ຈັດຂຶ້ນວັນທີ 7ເດືອນ 1 ປີ 1962 ຢູ່ທີ່ສວນກ້ວຍແຄມນ້ຳຂອງ (ໃກ້ຕະຫລາດເມືອງວັງວຽງປັດຈຸບັນ). ກອງປະຊຸມ ຖືເປັນກຽດຢ່າງສູງທີ່ມີ ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ພັກປະຊາຊົນ ປະຕິວັດລາວເຂົ້າຮ່ວມ.

ສູນກາງແນວລາວຮັກຊາດ ໄດ້ມອບນາມມະຍົດໃຫ້ ສະຫາຍ ສີທອງ ເປັນວິລະຊົນແຫ່ງຊາດ ຢ່າງສົມກຽດ ພ້ອມນີ້ກອງປະຊຸມຍັງໄດ້ເປັນເອກະພາບກັນ ຮັບຮອງເອົາທິດທາງໜ້າທີ່ໃໝ່ໃນ ການດຳເນີນການຕໍ່ສູ້ຕ້ານສົງຄາມພິເສດ ຂອງຈັກກະພັດອາເມລິກາ ແລະ ລູກມືຢູ່ພາຍໃນ ແຂວງ ນະຄອນຫຼວງວຽງຈັນຕໍ່ໄປຄື: **ຕໍ່ສູ້ເພື່ອປົກປັກຮັກສາລັດຖະບານປະສົມ, ອອກແຮງປັບ ປຸງກໍ່ສ້າງກຳລັງປະກອບອາວຸດ ແລະ ເຄິ່ງປະກອບອາວຸດສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ການຕໍ່ສູ້ທາງດ້ານການເມືອງກັບການຕໍ່ສູ້ທາງດ້ານອາວຸດ, ປົກປັກຮັກສາເຂດທີ່ໝັ້ນ ແລະ ເພີ່ມ ທະວີການນຳພາຂອງພັກ ເພື່ອຕອບສະໜອງກັບການຜັນແປຂອງສະພາບການໃນ ຕໍ່ໜ້າ:** ຈາກ ນັ້ນ ກອງປະຊຸມ ໄດ້ເປັນເອກະພາບກັນຮັບຮ້ອງເອົາການແຕ່ງຕັ້ງ ຄະນະກຳມະການພັກແຂວງ ນະຄອນຫລວງວຽງຈັນ ຊຸດໃໝ່ເຊິ່ງປະກອບດ້ວຍ 17 ສະຫາຍ ຄື:



ກອງປະຊຸມເຊີແນວກ່ຽວກັບລາວ (23 ກໍລະກົດ1962) ຮັບຮູ້ຄວາມເປັນ ເອກະລາດ ເປັນກາງ, ເອກະພາບ, ອະທິປະໄຕ ແລະ ຜືນແຜ່ນດິນ ອັນຄົບຖ້ວນ ຂອງລາວ

1. ສະຫາຍ ທິດເຄນ (ພໍ່ສະແຫວ໋) ເປັນເລຂາ
2. ສະຫາຍ ຄຳໄພ ອຸ່ນດາລາ ເປັນຮອງເລຂາ
3. ສະຫາຍ ຈັນທີ ຄຳມຸງຄຸນ(ພໍ່ບຸນເຫລືອ) ເປັນກຳມະການ
4. ສະຫາຍ ບຸນຫອມ ສຸພັນທອນ ເປັນກຳມະການ
5. ສະຫາຍ ຈານຕັນ (ພໍ່ຕ໋ຽງ) ເປັນກຳມະການ
6. ສະຫາຍ ຈານແກ່ນ (ພໍ່ເຖົ້າຖາວອນ) ເປັນກຳມະການ
7. ສະຫາຍ ພອນໄຊ ເປັນກຳມະການ
8. ສະຫາຍ ຄຳສີ ເປັນກຳມະການ
9. ສະຫາຍ ທອງແປນ ສຸກລາແລ໋ງ ເປັນກຳມະການ
10. ສະຫາຍ ຈານອຸ່ນ ເປັນກຳມະການ
11. ສະຫາຍ ຄຳຕັນ ເປັນກຳມະການ
12. ສະຫາຍ ພໍ່ເໜືອນ ເປັນກຳມະການ
13. ສະຫາຍ ທິດດີ ເປັນກຳມະການ
14. ສະຫາຍ ຄຳຍອດ ເປັນກຳມະການ
15. ສະຫາຍ ອິນແປ໋ງ ເປັນກຳມະການ
16. ສະຫາຍ ທອງວິນ ເປັນກຳມະການ
17. ສະຫາຍ ບຸນເກີ໋ງ ເປັນກຳມະການ



ท่าน ສີທອງ ວິລະຊົນແຫ່ງຊາດ

3. ໄລຍະຕໍ່ສູ້ຕ້ານສົງຄາມພິເສດ ຂອງອາເມລິກາ ແລະ ສ້າງຕັ້ງຄະນະພັກ ແຂວງ ນະຄອນຫລວງວຽງຈັນ (ວຽງຈັນ ຕາເວັນຕົກ ແລະ ວຽງຈັນ ເວັນອອກ) ປີ 1963 - 1973.



ທ່ານ ກົມມ ພົນເສນາ

ເຖິງແມ່ນວ່າ: ສັນຍາເຊີແນວ ປີ 1962 ກ່ຽວກັບລາວເປັນເທື່ອທີສອງ ຈະຖືກຮັບຮອງ ຈາກບັນດາປະເທດ, ຝ່າຍອາເມລິກາ ແລະ ລູກມືຂອງເຂົາເອງ ກໍຍອມຮັບຮູ້ການຟື້ນຟູ ສັນຕິພາບ ເປັນກາງ, ຄວາມເປັນເອກະລາດ, ເອກະພາບ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ; ຮັບຮູ້ລັດຖະບານປະສົມຊົ່ວຄົວແຫ່ງຊາດ ຄັ້ງທີ II ແລະ ໄດ້ເຮັດໃຫ້ສະພາບການພາຍໃນປະເທດມີຄວາມສະຫງົບລົງກໍຕາມ, ແຕ່ພວກຈັກກະພັດອາເມລິກາ ແລະ ລູກມືຂອງພວກເຂົາ ກໍຍັງບໍ່ທັນຍອມປະລະກົນອຸບາຍຮຸກຮານລາວ ເພື່ອເອົາລາວເປັນເມືອງຂຶ້ນແບບໃໝ່ ແລະ ຖານທັບຂອງພວກເຂົາ, ພວກເຂົາໄດ້ໃຊ້ເລ່ລ່ຽມກົນອຸບາຍຫລາຍປະການ ເພື່ອມ້າງເພກຳລັງປະຕິວັດ ແລະ ລັດຖະບານປະສົມສາມຝ່າຍ ພິປອງທຳລາຍບັນດາບຸກຄົນຂັ້ນນຳ ທີ່ສຳຄັນຂອງກຳລັງປະຕິວັດທີ່ເຂົ້າຮ່ວມລັດຖະບານປະສົມ ດຳເນີນການຊື້ຈ້າງຈອບອອຍ ນາບຂູ່ບັນດາບຸກຄົນທີ່ກ້າວໜ້າມີທ່າອ່ຽງສັນຕິພາບ ສ້າງຄວາມຖືກຕ້ອງປອງດອງຊາດ, ດຶງເອົາເຈົ້າສຸວັນນະພູມາ, ກອງແລ ແລະ ພາກສ່ວນໜຶ່ງໃນກຳລັງເປັນກາງໃຫ້ມາຮ່ວມກັບຝ່າຍຂວາ ໝາຍເຖິງລາຊະອານາຈັກລາວຊອກຫາວິທີລອບຄາດຕະກຳ ຕໍ່ບຸກຄົນ ຂັ້ນນຳຂອງກຳລັງປະຕິວັດ. ພວກເຂົາໄດ້ລອບຂ້າດຕະກຳ ທ່ານ ກົມມ ພົນເສນາ ລັດຖະມົນຕີກະຊວງການຕ່າງປະເທດ, ຫົວໜ້າພັກສັນ ຕິພາບ, ຜູ້ນຳກຳລັງເປັນກາງຮັກຊາດ ຢູ່ນະຄອນຫລວງວຽງຈັນ ໃນຕອນຄ່ຳ ຂອງ ວັນທີ 1 ເມສາ ປີ1963 ຢ່າງໂຫດຫ້ຽມ ຢູ່ທີ່ເຮືອນຂອງເພິ່ນເອງ❶ ຢູ່ໃນເຂດທີ່ໝັ້ນຂອງ ແຂວງ ນະຄອນຫລວງວຽງຈັນ ນັ້ນ ພວກເຂົາໄດ້ດຳເນີນການກວາດລ້າງ, ປາບປາມຢ່າງໜັກໜ່ວງ, ນັບແຕ່ ພູພະນັງ ຂຶ້ນໄປຫາ ລ້ອງແມດ ພ້ອມທັງປະກາດພາວະສຸກເສີນຢູ່ຕົວເມືອງ ແລະ ທົ່ງພຽງ ເພື່ອເຮັດໃຫ້ການຊີ້ນຳຂອງແຂວງຖືກຕັດຂາດ ເປັນຕົ້ນ ເມືອງ ຈັນທະບູນ ປະຈຸບັນແມ່ນ ເມືອງ ທຸລະຄົມ ຖືກຕັດນັບທັງໜ່ວຍໂຄສະນາປະກອບອາວຸດ ຈຳນວນ 25 ສະຫາຍ, ນັກຂ່າວໃຕ້ດິນໂດຍແມ່ນ ທ່ານ ຈັນທີ ເດືອນສະຫວັນ ແລະ ໜ່ວຍປະຕິບັດງານ ລຸງ ທິດທາ, ລຸງທອງໃສ ແຕ່ກໍດ້ຮັບການຊ່ວຍເຫລືອເບິ່ງແຍງຈາກປະຊາຊົນ ໂດຍສະເພາະ ທິດແກ່ນ, ແມ່ແກ່ນ ບ້ານ ຫາດສວນ ແລະ ບັນ

---

(1). ທ່ານ ກົມມ ພົນເສນາ ຜູ້ນຳຄົນສຳຄັນໃນກຳລັງເປັນກາງຮັກຊາດຖືກກຸ່ມກະບົດ ພູມີ ໜໍ່ສະຫວັນ ລອບຄາດຕະກຳ ໃນຄືນວັນທີ 1.4.1963 ທີ່ເຮືອນເພິ່ນເອງ ໂດຍການຈ້າງທະຫານໃກ້ຊິດ ຊື່ ທ້າວ ກອງ ເປັນຜູ້ໃຊ້ປືນຍິງ ເວລາລົງຈາກລົດ ຕອນກັບມາແຕ່ໄປຮ່ວມງານລ້ຽງກັບເຈົ້າຊີວິດ.



ພາຍໃຕ້ຮູບການຊ່ວຍເຫລືອ ທາງດ້ານເສດຖະກິດອາເມລິກາ
ໄດ້ເອົາທີ່ປຶກສາທາງທະຫານເຂົ້າມາລາວ

ດາຣາກຖາມຜູ້ອື່ນໆ ສິ່ງອາຫານການກິນ ຢູ່ນຳເດັກນ້ອຍລ້ຽງຄວາຍ ແລະ ສິ່ງຂ່າວ ໃນເວລາທີ່ ກຳລັງທະຫານພາກ 5 ຂອງລາຊະອານາຈັກ ບັນຊາໂດຍ ພັນໂທ ສີ ລິງມາກວາດລ້າງໃນຂະ ນະທີ່ ທ່ານ ຈັນທີ ເດືອນສະຫວັນ ຢູ່ໂດດ່ຽວຊ້ຳພັດເປັນໄຂ້ຍຸງໜັກ ທິດແກ່ນ ໄດ້ພາໄປປິ່ວ ຢູ່ໂຮງໝໍນ້ອຍ ທີ່ພູເຂົາຄວາຍ ໂດຍນາຍໝໍ ຄຳແພງ ແລະ ແພດ 1 ສະຫາຍ ເປັນຜູ້ປິ່ນປົວ, ພາຍຫລັງນາຍໝໍ ຄຳແພງ ປົວທ່ານ ຈັນທີ ເດືອນສະຫວັນດີແລ້ວ ນາຍໝໍ ຄຳແພງ ເອງກໍຖືກ ປ່ວຍໜັກຈົນເຖິງເສຍຊີວິດ, ໃນເວລານັ້ນ ສັດຕູໄດ້ກວາດລ້າງຢ່າງເອົາຈິງເອົາຈັງ ເຮັດໃຫ້ປະ ຊາຊົນ ສິ່ງເຂົ້າປາອາຫານ, ຢຸກຢາໃຫ້ພະນັກງານເຮົາບໍ່ໄດ້ ເພາະສັດຕູ ມີຄຳສັ່ງຫ້າມຄົນອອກ ບ້ານ, ບັນດາແມ່ເຖົ້າ ແລະ ຍິງສາວໄດ້ເຊື່ອງຫໍ່ເຂົ້າໃສ່ໃນພົກສົ້ນ ປອມຕົວເປັນແມ່ມານ ໄປ ເອົາຟືນ, ໄປຫາກິນເພື່ອສົ່ງຫໍ່ເຂົ້າ. ເຖິງວ່າບໍ່ພຽງພໍ ແຕ່ກໍ່ສາມາດແກ້ໄຂຊີວິດການເປັນຢູ່ຂອງ ໜ່ວຍປະຕິບັດງານ ແຂວງ ນະຄອນຫລວງວຽງຈັນ ໃຫ້ຜ່ານຜ່າອຸປະສັກໃນສະໄໝຕໍ່ສູ້ກູ້ຊາດ ເປັນເວລາ 30 ປີ ເພື່ອຄວາມເປັນເອກະລາດ, ອິສະລະພາບ ແລະ ຄວາມຍຸດຕິທຳໃນສັງຄົມ ຢືນຕໍ່ໜ້າສະພາບການ ຄືດັ່ງກ່າວນັ້ນ, ຄະນະພັກແຂວງ ນະຄອນຫລວງວຽງຈັນ ໄດ້ອອກແຮງຊີ້ ນຳ - ນຳພາຈັດຕັ້ງປະຕິບັດທິດທາງໜ້າທີ່ຂອງຕົນ ທີ່ກອງປະຊຸມພະນັກງານ ແຂວງ ນະຄອນ ຫລວງວຽງຈັນ ວາງອອກ ໃນວັນທີ 7/11/ ປີ 1962 ຢ່າງຕັ້ງໜ້າຜ່ານຜ່າອຸປະສັກ ເພື່ອທັບມ້າງ ເລ່ລ່ຽມກົນອຸບາຍ ອັນໂຫດຫ້ຽມຂອງສັດຕູໃຫ້ປະລາໄຊລົງ.



ກອງປະຊຸມປະສົມສາມຝ່າຍ ເຊັນສັນຍາ ສ້າງຕັ້ງລັດຖະບານປະສົມແຫ່ງຊາດ ຄັ້ງທີ II (12/6/1962)



ປະຊາຊົນຢູ່ເຂດປົດປ່ອຍໂຮມຊຸມນຸມສະໜັບສະໜູນ ການຈັດຕັ້ງ
ລັດຖະບານປະສົມຊົ່ວຄາວແຫ່ງຊາດ ຊຸດທີ 2



ຊາວນະຄອນຫລວງວຽງຈັນ ເປັນຈຳນວນໝື່ນຄົນ ໂຮມຊຸມນຸມຕ້ອນຮັບໄຊຊະນະການເຊັນສັນຍາ
ກ່ຽວກັບລາວ ແລະ ຟັງສະເດັດເຈົ້າສຸພານຸວົງ ໂອ້ລົມກ່ຽວກັບສະພາບການຢູ່ລາວ ພາຍຫລັງການສ້າງຕັ້ງລັດຖະບານ
ປະສົມຊົ່ວຄາວ ແຫ່ງຊາດ ຊຸດທີ 2



ຄະນະລັດຖະບານປະສົມຊົ່ວຄາວແຫ່ງຊາດ ຊຸດທີ 2 (12 ມິຖຸນາ 1962)

ວັນທີ 28 ສິງຫາ ປີ 1962 ລັດຖະບານປະສົມ ໄດ້ຕົກລົງເປັນເອກະພາບ ວ່າ: ຈະສ້າງ ຄວາມຖືກຕ້ອງປອງດອງຊາດ ເຄົາລົບອຳນາດອະທິປະໄຕ, ປະຕິບັດສິດປະຊາທິປະໄຕ, ຮັບ ປະກັນຄວາມປອດໄພໃຫ້ແກ່ປະຊາຊົນ, ປະຕິບັດສິດສະເໜີພາບ ແລະ ປັບປຸງຊີວິດການເປັນ ຢູ່ຂອງປະຊາຊົນ ໃຫ້ດີຂຶ້ນເປັນກ້າວໆ ນັບແຕ່ ເດືອນ 6 - 10 ປີ 1962 ບັນດາອົງການຈັດຕັ້ງ, ພະນັກງານ, ລາຊະການ, ຕຳຫລວດສົມທົບກັບປະຊາຊົນ ໃນອຳນາດການປົກຄອງຝ່າຍວຽງຈັນ ໄດ້ຈັດຕັ້ງແຫ່ຂະບວນ, ຊຸມນຸມມິດຕິງນັບເປັນພັນໆຄົນຂຶ້ນ ຢູ່ນະຄອນຫລວງວຽງຈັນ ເພື່ອສະ ໜັບສະໜູນລັດຖະບານປະສົມ, ອອກຖະແຫລງການຊົມເຊີຍ ສະໜັບສະໜູນນະໂຍບາຍ ສັນຕິພາບ, ເປັນກາງ ແລະ ນະໂຍບາຍການຕ່າງປະເທດ ຂອງລັດຖະບານປະສົມ ຊົ່ວຄາວ ແຫ່ງຊາດ.

ການສ້າງຕັ້ງຄະນະພັກ ແຂວງ ນະຄອນຫລວງວຽງຈັນ (ວຽງຈັນ ຕາເວັນຕົກ ແລະ ວຽງຈັນ ຕາເວັນອອກ).

ມາຮອດປີ 1964 ອີງໃສ່ຄວາມຮຽກຮ້ອງຕ້ອງການ ເພື່ອຕໍ່ສູ້ຍາດເອົາໄຊຊະນະກັບສັດຕູຢູ່ພາຍໃນ ແຂວງ ນະຄອນຫລວງວຽງຈັນນັ້ນ ມັນຕ້ອງການໃຫ້ມີການນຳພາທີ່ແທດເໝາະກັບສະພາບຕົວຈິງ ແລະ ມີປະສິດທິຜົນກວ່າເກົ່າ, ສູນກາງພັກ ຈຶ່ງໄດ້ຕົກລົງແບ່ງ ແຂວງ ນະຄອນຫລວງວຽງຈັນ ອອກເປັນ 2 ພາກສ່ວນ ເອີ້ນວ່າ: ແຂວງ ວຽງຈັນ ຕາເວັນຕົກ ແລະ ແຂວງ ວຽງຈັນ ຕາເວັນອອກ ດັ່ງນີ້:

ແຂວງ ວຽງຈັນ ຕາເວັນອອກ ໄດ້ກຳນົດເອົາເຂດ ເມືອງ ຮົ່ມ ລົງກວມເອົາທັງໝົດທົ່ງພຽງ ວຽງຈັນ ແລະ ສ່ວນໜຶ່ງຂອງ ເມືອງ ປາກຊັນ; ສ່ວນແຂວງ ວຽງຈັນ ຕາເວັນອອກ ໄດ້ແບ່ງອອກເປັນ 2 ເຂດຄື:

ເຂດແກ້ງນ້ອຍ ເວີນສານ ຂຶ້ນໄປພູຫວດ, ພູແຊ ແລະ ຜາລະແວກ. ເຂດທົ່ງພຽງ ວຽງຈັນ ເຂດໃຈກາງ ນະຄອນຫລວງວຽງຈັນ ແລະ ສ່ວນໜຶ່ງຂອງ ເມືອງ ປາກຊັນ (ເຂດນີ້ເອີ້ນວ່າ: ວຽງຈັນໃຕ້).

ຄະນະກຳມະການພັກ ແຂວງວຽງຈັນ ຕາເວັນອອກ ປະກອບ ມີ 9 ສະຫາຍ ຄື:

1. ສະຫາຍ ຈັນທີ ຄຳມຸງຄຸນ (ພໍ່ບຸນເຫລືອງ)[1] ເປັນເລຂາ
2. ສະຫາຍ ທອງແປນ ສຸກລາແສງ ເປັນຮອງເລຂາ
3. ສະຫາຍ ບຸນທອມ ສຸພັນທອນ ເປັນກຳມະການ
4. ສະຫາຍ ຈານແກ່ນ ແພງນໍລິນ ເປັນກຳມະການ
5. ສະຫາຍ ບຸນເກີ່ງ ເປັນກຳມະການ
6. ສະຫາຍ ພໍ່ທິດດີ ເປັນກຳມະການ
7. ສະຫາຍ ພໍ່ເໜືອນ ເປັນກຳມະການ
8. ສະຫາຍ ພໍ່ຕົ່ງເນັ່ງວາ ເປັນກຳມະການ
9. ສະຫາຍ ຢົ່ງເກົ່າ ເປັນກຳມະການ



ສະຫາຍ ຈັນທີ ຄຳມຸງຄຸນ

ສະຫາຍ ຈັນທີ ຄຳມຸງຄຸນ (ພໍ່ບຸນເຫລືອງ) ເລຂາພັກ ແຂວງ ວຽງຈັນ ຕາເວັນອອກ ປີ 1964 - 1972

ຄະນະກຳມະການພັກແຂວງວຽງຈັນ ຕາເວັນອອກມາ ຮອດປີ 1967 ໄດ້ມີການປັບປຸງ ປະກອບສະຫາຍ ບົວໄລ ແສນຈິງຮັກ ແລະ ພໍ່ເພຍຫລວງ ເຂົ້າເພີ່ມຕື່ມອີກ.

ແຂວງ ວຽງຈັນ ຕາເວັນຕົກ ກວມເອົາລ້ອງສັງ - ລ້ອງຕອນ, ລ້ອງແມດ, ວັງວຽງ, ກາສີ, ເມືອງ ເຟືອງ, ຊະນະຄາມ ແລະ ປາກລາຍ. ແຂວງ ວຽງຈັນ ຕາເວັນຕົກ ໄດ້ແບ່ງອອກເປັນ 4 ເຂດຄື:

1. ເຂດລ້ອງສັງ - ລ້ອງຕອນ
2. ເຂດວັງວຽງ - ເມືອງເຟືອງ
3. ເຂດລ້ອງແມດ, ກາສີ, ປາກລາຍ
4. ເຂດຊະນະຄາມ


ຄະນະກຳມະການພັກ ແຂວງ ວຽງຈັນ ຕາເວັນຕົກ ປະກອບມີ 9 ສະຫາຍ.

1. ສະຫາຍ ທິດເຄນ (ພໍ່ສະແຫວງ)	ເປັນເລຂາ
2. ສະຫາຍ ຄຳໄພ ອຸ່ນດາລາ	ເປັນຮອງເລຂາ
3. ສະຫາຍ ຈານຕັນ (ພໍ່ຕຽງ)	ເປັນກຳມະການ
4. ສະຫາຍ ພອນໄຊ	ເປັນກຳມະການ
5. ສະຫາຍ ຄຳຕັນ	ເປັນກຳມະການ
6. ສະຫາຍ ຄຳສີ	ເປັນກຳມະການ
7. ສະຫາຍ ທອງວິນ	ເປັນກຳມະການ
8. ສະຫາຍ ອິນແປງ	ເປັນກຳມະການ
9. ສະຫາຍ ຄຳຍອດ	ເປັນກຳມະການ

- ການປະກອບສ່ວນຕໍ່ສູ້ ຕີເອົາຊະນະສົງຄາມພິເສດ ຂອງຈັກກະພັດ ແລະ ລູກມື:
(ປີ 1964 -1968).

ເລີ່ມແຕ່ກາງປີ 1964 ຍ້ອນຈັກກະພັດອາເມລິກາ ແລະ ລູກມືຖືກປະລາໄຊໜັກ ໃນການບຸກຕີບຽດຢຶດເຂດປົດປ່ອຍ ແລະ ຍ້ອນຖືກປະລາໄຊ ໃນການແບ່ງແຍກຄວາມສຳພັນລະຫ່ວາງ ແນວລາວຮັກຊາດກັບກຳລັງເປັນກາງຮັກຊາດ, ພ້ອມກັນນັ້ນເພື່ອເປັນການສົມທົບກັບສົງຄາມ ພາກສ່ວນຂອງເຂົາຢູ່ພາກໃຕ້ຫວຽດນາມ ແລະ ສົງຄາມທຳລາຍຢູ່ພາກເໜືອຫວຽດນາມ, ລັດ ຖະບານສະຫະລັດອາເມລິກາໄດ້ດຳເນີນນະໂຍບາຍ ປັ່ນຂັ້ນໃດສົງຄາມ ດ້ວຍການໃຊ້ກອງທັບ ອາກາດ ເຂົ້າຮ່ວມສົງຄາມຢູ່ລາວ, ເຮັດໃຫ້ສົງຄາມພິເສດຢູ່ລາວ ຂະຫຍາຍຕົວຂຶ້ນສູ່ລະດັບສູງ.

ໃນວັນທີ 17 ເດືອນ ພຶດສະພາ ປີ1964 ລັດຖະບານຫຸ່ນວຽງຈັນ ໄດ້ເຊັນສັນຍາຕົກລົງໃຫ້ອາເມລິກາ ໃຊ້ຍົນຖິ້ມລະເບີດຍິງທຳລາຍເຂດປົດປ່ອຍຂອງແນວລາວຮັກຊາດຢ່າງປ່າເຖື່ອນ. ເພື່ອສະໜັບສະໜູນການບຸກໂຈມ ຕີທາງພາກພື້ນດິນຂອງທະຫານຫຸ່ນວຽງຈັນ.



ຢູ່ນະຄອນຫຼວງວຽງຈັນ ເພື່ອປະຕິບັດ ກົນອຸບາຍຮຸກຮານປົ້ນຂັ້ນໄດເພີ່ມທະວີ ຂອງອາເມລິກາ ຢູອິນດູຈີນ ແລະ ຢູ່ລາວ ໃນວັນ ທີ 17 ພຶດສະພາ 1964 ລັດທະບານຫຸ່ນ(ຝ່າຍຂວາ) ວຽງຈັນ ໄດ້ເຊັນຕົກລົງໃຫ້ອາເມລິກາ ໃຊ້ຍົນເລີ່ມຖິ້ມລະເບີດໃສ່ເຂດປົດປ່ອຍ, ອາເມລິກາໄດ້ຂົນລະເບີດຫຼາຍກ່ວາ 3 ລ້ານໂຕ່ນ ຍິງຖະຫຼິ້ມໃສ່ເຂດປົດປ່ອຍຂອງລາວ
(ໃນຮູບ ຂຸມລະເບີດຢູ່ທົ່ງນາຂອງປະຊາຊົນ ແຂວງຊຽງຂວາງ)


ຢູ່ນະຄອນຫລວງວຽງຈັນ ເປັນສູນກາງການບັນຊາ ຂອງສັດຕູທາງດ້ານການເມືອງ, ການທະຫານ ແລະ ທຸກກົງຈັກທີ່ສຳຄັນທາງສົງຄາມ ຂອງພວກຈັກກະພັດອາເມລິກາ (ທີ່ປຶກສາທາງດ້ານການທະຫານ, ໜ່ວຍງານສືບລາຊະການລັບ CIA, ສຳນັກຂ່າວກອງ USIS) ແລະ ນາຍທະຫານຊັ້ນນຳຂອງກຳລັງຝ່າຍຂວາ ໝາຍເຖິງລາຊະອານາຈັກວຽງຈັນ ພ້ອມທັງກຳລັງທັບພາກ 5 ຖືວ່າເປັນພາກທີ່ໃຫຍ່ກວ່າໝູ່ ແມ່ນນອນຢູ່ໃນເຂດວຽງຈັນ ພວກເຂົາຊອກທຸກວິທີທາງດຳເນີນສົງຄາມ ເພື່ອດັບມອດຂະບວນການປະຕິວັດ. ພວກເຂົາອອກແຮງກວາດລ້າງປາບປາມ ຜູ້ຮັກຊາດ ຂະບວນການຕໍ່ສູ້ຂອງປະຊາຊົນ ໄປຮອດບ່ອນໃດເຂົາກໍຈູດເລົ້າເຂົ້າ ເຜົາຫລັງເຮືອນຈັບກຸມຄຸມຂັງທຸບຕີທໍລະມານຂົ່ມຂືນທຳສຳເລົ້າຍິງສາວ, ເຂັ່ນຂ້າຫລາຍຮູບແບບ ເພື່ອຂົ່ມຂູ່ນ້ຳໃຈຮັກຊາດຂອງປະຊາຊົນ ເຊັ່ນວ່າ: ຂ້າດ້ວຍອາວຸດປືນ, ເຈາະທ້ອງດ້ວຍມີດ, ແຂວນຄໍໃສ່ ຕົ້ນໄມ້ ແລະ ອື່ນໆ ຢ່າງປ່າເຖື່ອນ ໂດຍເພັດສະຄາດ ຜູ້ຊື່ວ່າ: ຈ່າຂັນຕິນມີບໍລິສຸດຂອງຈັກກະພັດອາເມລິກາ❶.



ປະຊາຊົນລາວຖືກທຸບຕີທໍລະມານ

---

(1) ຈ່າຂັນ, ເປັນຄົນທອງຖິ່ນວຽງຈັນ ແລະ ເປັນໜຶ່ງໃນຈຳນວນລູກແຫ້ລ່ງຕິນມີ ຂອງອາເມລິກາ, ເຊິ່ງປະຊາຊົນວຽງຈັນ ບໍ່ສາມາດຈະຫລົງລືມໂທດກຳ ອັນຫລົ້ນຟ້າ ເຫລືອແຜ່ນດິນ ທີ່ມັນໄດ້ສ້າງໄວ້.









ໂທດກຳອັນໂຫດຮ້າຍປ່າເຖື່ອນ ຂອງຈັກກະພັດອາເມລິກາຜູ້ຮຸກຮານ ແລະ ລູກແຫ່ງຕີນມືຂອງພວກເຂົາ
ທີ່ມີຕໍ່ປະຊາຊົນລາວ











ໂທດກຳອັນໂຫດຮ້າຍປ່າເຖື່ອນ ຂອງຈັກກະພັດອາເມລິກາຜູ້ຮຸກຮານ ແລະ ລູກແຫ່ງຕົນມື ຂອງພວກເຂົາ
ທີ່ມີຕໍ່ປະຊາຊົນລາວ

ປະຊາຊົນ ແລະ ຜູ້ຮັກຊາດຈຳນວນໜຶ່ງ ທີ່ຖືກຂ້າດ້ວຍວິທີ ແຂວນຄໍໃສ່ງ່ຳໄມ້ ຢ່າງປ່າເຖື່ອນ ມີ:

1. ນາງ ຈັນ (ແມ່ນ່ວນ) ບ້ານ ນາອ່າງ ເມືອງ ເຟືອງ
2. ນາງ ຜອງ (ແມ່ກະແດງ) ບ້ານ ນາອ່າງ ເມືອງ ເຟືອງ
3. ນາງ ມາ (ແມ່ໄຂ) ບ້ານ ນາອ່າງ ເມືອງ ເຟືອງ
4. ນາງ ຊົມ (ແມ່ດິງ) ບ້ານ ນາອ່າງ ເມືອງ ເຟືອງ
5. ນາງ ເຟືອງ (ແມ່ເຟືອງ) ບ້ານ ນາອ່າງ ເມືອງ ເຟືອງ
6. ນາງ ໄມ (ແມ່ມີງ) ບ້ານ ນາອ່າງ ເມືອງ ເຟືອງ
7. ນາງຫລ້າ (ແມ່ໃບ) ບ້ານ ນາອ່າງ ເມືອງ ເຟືອງ
8. ນາງໄລ (ແມ່ບົວໄຂ) ບ້ານ ນາອ່າງ ເມືອງ ເຟືອງ
9. ທ້າວ ກືນ (ພໍ່ຄັບ) ບ້ານ ນາອ່າງ ເມືອງ ເຟືອງ
10. ທ້າວ ບຸນ (ພໍ່ເຟືອງ) ບ້ານ ນາອ່າງ ເມືອງ ເຟືອງ
11. ທ້າວ ທາ (ພໍ່ຄຳ) ບ້ານ ນາອ່າງ ເມືອງ ເຟືອງ
12. ທ້າວ ເກີງ ບ້ານ ນາອ່າງ ເມືອງ ເຟືອງ
13. ທ້າວ ລີ ບ້ານ ນາອ່າງ ເມືອງ ເຟືອງ

ຕໍ່ໜ້າສະພາບການອັນສັບສົນ ແລະ ເຄັ່ງຕຶງນັ້ນ, ຄະນະບໍລິຫານງານສູນກາງພັກໄດ້ເປີດກອງປະຊຸມ ເພື່ອຕີລາຄາສະພາບການ ແລະ ວາງທິດທາງໜ້າທີ່ຂອງການປະຕິວັດລາວ ໃນຊຸມປີຕໍ່ໜ້າ. ກອງປະຊຸມໄດ້ວາງໜ້າທີ່ສະເພາະໜ້າ ມີ 6 ປະການຄື :

1. ປຸກລະດົມສົງຄາມປະຊາຊົນຢ່າງແຂງແຮງ, ອອກແຮງກໍ່ສ້າງກຳລັງປະກອບອາວຸດທັງສາມປະເພດ.

2. ປັບປຸງ ແລະ ຂະຫຍາຍ ອົງການຈັດຕັ້ງປະຕິວັດຂອງມະຫາຊົນ, ອອກແຮງແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຊຸກຍູ້ການເຄື່ອນໄຫວທຸກດ້ານໃຫ້ເຂັ້ມແຂງ.

3.ອອກແຮງປັບປຸງເຂດປົດປ່ອຍໃນທຸກດ້ານ, ກໍ່ສ້າງເຂດປົດປ່ອຍໃຫ້ເປັນຄືລັດໜຶ່ງ ເພື່ອເປັນບ່ອນອີງອັນໜັກແໜ້ນ ໃຫ້ແກ່ການຕໍ່ສູ້ຢູ່ໃນທົ່ວປະເທດ.

4. ຊຸກຍູ້ການເຄື່ອນໄຫວປະຕິວັດ ຢູ່ເຂດຄວບຄຸມຊົ່ວຄາວຂອງສັດຕູ.


5. ເພີ້ມທະວີການຕໍ່ສູ້ທາງການເມືອງ, ປົກປັກຮັກສາສັນຍາເຊີແມວ ປີ1962 ກ່ຽວກັບ ລາວ ແລະ ບັນດາສັນຍາ ທີ່ໄດ້ເຊັນກັນລະຫວ່າງສາມຝ່າຍ; ເພີ້ມທະວີວຽກງານການຕ່າງປະເທດ, ຍາດເອົາຄວາມເປັນໃຈສະໜັບສະໜູນຊ່ວຍເຫລືອ ຈາກບັນດາປະເທດອ້າຍນ້ອງ.

6. ອອກແຮງກໍ່ສ້າງ, ບຳລຸງພະນັກງານ, ເພີ້ມທະວີການນຳພາຂອງພັກ.

ເພື່ອປະຕິບັດທິດທາງໜ້າທີ່ ສະເພາະໜ້າທີ່ ຄະນະບໍລິຫານງານ ສູນກາງພັກ ວາງອອກ ນັ້ນ, ຄະນະພັກ ແຂວງ ນະຄອນຫລວງວຽງຈັນ (ວຽງຈັນ ຕາເວັນຕົກ ແລະ ວຽງຈັນ ຕາເວັນ ອອກ) ໄດ້ປະສານສົມທົບກັນຢ່າງແໜ້ນແຟ້ນຊີ້ນຳ - ນຳພາກຳລັງປະຕິວັດກໍຖືກກຳລັງປະກອບ ອາວຸດທ້ອງຖິ່ນ ທີ່ຢູ່ຕາມຖານທີ່ໝັ້ນຕ່າງໆ ໄດ້ພະຍາຍາມໝູນໃຊ້ທຸກວິທີ ແລະ ໂອກາດທີ່ອຳ ນວຍສະກັດລັດຕິສັດຕູ ທີ່ເຄື່ອນໄຫວໄປມາຢູ່ຕາມເສັ້ນທາງ ເລກທີ 10, ເສັ້ນທາງ ເລກທີ 13 ເໜືອ, ເສັ້ນທາງ ເລກທີ 13 ໃຕ້ ແລະ ຕາມບັນດາເສັ້ນທາງແຍກທີ່ສຳຄັນຕ່າງໆ, ພາຍໃນ ນະ ຄອນຫລວງວຽງຈັນ ເພື່ອບັນທອນກຳລັງຂອງພວກເຂົາ ເປັນແຕ່ລະໄລຍະອັນເຮັດໃຫ້ພວກເຂົາ ໄດ້ສູນເສຍທັງກຳລັງພົນ ແລະ ພາຫະນະສົງຄາມຢ່າງຫລວງຫລາຍ ເປັນການບັ່ນທອນກຳລັງ ຂອງສັດຕູຢູ່ຕີ້ນທາງ ແລະ ກໍເປັນການຕີສັດຕູຊ່ວຍແນວຫລັງຂອງພວກເຮົາ. ການສະກັດລັດຕິ ກໍແມ່ນໜ້າທີ່ຂອງໝົດທຸກກອງຮ້ອຍ ປະກອບອາວຸດຂອງ ນະຄອນຫລວງວຽງຈັນ ທີ່ປະຈຳຢູ່ແຕ່ ລະເຂດ, ແຕ່ກອງທີ່ໄດ້ເຮັດໜ້າທີ່ລົງເລິກວຽກນີ້ ສະເພາະນັ້ນແມ່ນກອງຮ້ອຍ 14 ແລະ ກອງ ຮ້ອຍ 70 ຂອງເຂດວຽງຈັນໃຕ້. ໄປພ້ອມກັບການສະກັດລັດຕິ ເພື່ອບັ່ນທອນກຳລັງຂອງສັດຕູ ດັ່ງກ່າວ ກຳລັງປະກອບອາວຸດປະຕິວັດ ກໍໄດ້ອອກແຮງບຸກໂຈມຕີບັນດາປົດຄ້າຍ ແລະ ຄັງສາງ ອາວຸດຂອງສັດຕູ ທີ່ຢູ່ຕາມຈຸດຍຸດທະສາດທີ່ສຳຄັນຕ່າງໆ ຢູ່ພາຍໃນແຂວງ ເຊັ່ນ: ຄ້າຍແກງ ນ້ອຍ, ນາເຫລື້ອງ, ນາເຄືອ, ພູເຂົາຄວາຍ, ບ້ານເກີ່ນ, ນາແພງ, ເຂດເມືອງ ທຸລະຄົມ, ຄ້າຍ ຫາດເດື່ອ, ທ່າລາດ, ສາມໝື່ນ, ເມືອງ ເຟືອງ, ເຂດກົກແຫ້, ປາກຕອນ, ເຂດເມືອງ ນາຊາຍ ທອງ, ເຂດຜາຕັ້ງ, ຜາຮອມ, ເດີນຍົນວັງວຽງ ແລະ ບໍລິເວນອ້ອມຕົວເມືອງຂອງເມືອງວັງວຽງ, ເຂດປາຍັນ, ນາເທົ່າ, ນາປາຈາດ ຂອງເມືອງ ກາສີ, ເຂດນາເດື່ອ, ບ້ານ ດົງຂ່າ, ບ້ານ ຊະນະ ຄາມ, ບ້ານ ເມືອງຂີ້ ແລະ ບ້ານ ນ້ຳແຜນ ເມືອງ ຊະນະຄາມ.


ບັ້ນຕີເອົາຊະນະການບຸກຕີ ຂອງສັດຕູຢູ່ເມືອງຮິ່ມ ປີ 1967 - 1968.

ການເປີດບັ້ນສົງຄາມພິເສດ ຂອງຈັກກະພັດອາເມລິກາ ເພື່ອຈະດັບສູນກຳລັງປະຕິວັດ ຢູ່ໃນຂອບເຂດທົ່ວປະເທດນັ້ນ ໃນປີ1967 - 1968 ນະຄອນຫລວງວຽງຈັນ (ເຂດ ວຽງຈັນ ເ,ຕ ວັນອອກ ລ້ອງຊານ ແລະ ຜາລະແວກ) ກໍໄດ້ຮັບເຄາະຮ້າຍດັ່ງກ່າວນັ້ນ ກຳລັງພາກພື້ນດິນ ຈາກພາກ 5 ຈຳນວນ 5 ກອງພັນ ມີທັງກອງຕີພິເສດ (ກອມມັງໂດ) ແລະ ສ່ວນໜຶ່ງຂອງທະ ຫານ ວາງປາວ ສົມທົບກັບກຳລັງທາງອາກາດ ບຸກຖະຫລົ່ມເຂດທີ່ໝັ້ນເມືອງຮິ່ມ(ເຂດລ້ອງຊານ ແລະ ຜາລະແວກ) ເປັນເວລາເກືອບ 2 ປີ, ເພື່ອຫວັງຈະດັບສູນກຳລັງປະຕິວັດຢູ່ເຂດດັ່ງກ່າວ ພ້ອມທັງຫວັງເພື່ອຕັດສາຍທາງຕິດຕໍ່ລະຫວ່າງ ນະຄອນຫລວງວຽງຈັນ ຫາສູນກາງບໍ່ໃຫ້ສົ່ງຂ່າວ ຫາກັນໄດ້ ແລະ ເຮັດໃຫ້ວຽງຈັນ ບໍ່ມີຖານທີ່ໝັ້ນປະຕິວັດ, ພວກເຂົາໃຊ້ຍົນເບ 52 ຍິງ ທຳລາຍ



ທິດບຸນຄົງ ກອງພອນເຂດຊຽງຂວາງໃຊ້ປືນເຫຼັກຍາວ "ກະລັ" ຍິງຍົນອາເມລິກາຕົກກັບທີ ໃນປີ 1958





ກອງປ້ອງກັນອາກາດ
ກອງທັບປົດປ່ອຍ ປະຊາ
ຊົນລາວ ປ້ອງກັນນ່ານຟ້າ
ຂອງເຂດປົດປ່ອຍດ້ວຍ
ຄວາມພິລະອາດຫານ

ໃສ່ຈຸດທີ່ໝັ້ນຕ່າງໆ ອັນໄດ້ເຮັດໃຫ້ຂົງເຂດນັ້ນ ເຕັມໄປແຕ່ບວກໜອງຂຸມລະເບີດ 500 ກິໂລ ຂອງສັດຕູ, ທາງພາກພື້ນດິນ ນຳໃຊ້ຍິນ ເອເລກອບແຕ ຂົນກຳລັງທະຫານລາບ ໄປໂຍດລົງປະ ຈຳຢູ່ແຕ່ລະຈຸດຍຸດທະສາດເພື່ອປິດລ້ອມ ແລະ ເຄື່ອນກຳລັງບຸກໂຈມຕີເຂດພູຫວດ, ພູແຊ, ພູ ໂຊດ, ພູຜາຂາວ, ເຂດລ້ອງຊານ ແລະ ຜາລະແວກຢ່າງໜັກໜ່ວງ, ໄປພ້ອມກັນນັ້ນ ສັດຕູຍັງໃຊ້ ຍິນຫວ່ານຢາພິດ (ຝົນສີເຫລືອງ) ລົງມາທຳລາຍຊີວິດຄົນ ແລະ ສັດ ຕະຫລອດຮອດຜົນລະ ປູກຕ່າງໆ ຫວັງດັບສູນບໍ່ໃຫ້ມີຫຍັງເຫລືອຄ້າງ, ຢືນຢູ່ຕໍ່ໜ້າສະພາບການດັ່ງກ່າວນັ້ນ. ຄະນະ ພັກ ແຂວງ ວຽງຈັນ ຕາເວັນອອກ ໄດ້ຊີ້ນຳ - ນຳພາຕໍ່ສູ້ ຕ້ານການກວາດລ້າງ ຂອງສັດຕູຢ່າງ ເດັດດ່ຽວ ເພື່ອປົກປັກຮັກສາເຂດທີ່ໝັ້ນປະຕິວັດ ກໍຄືຊີວິດຊັບສົມຂອງປະຊາຊົນເຮົາໄວ້ ໂດຍ ໄດ້ຈັດແບ່ງກຳລັງປະກອບອາວຸດຂອງ ແຂວງຈຳນວນໜຶ່ງ ເຂົ້າເຄື່ອນໄຫວຕີສັດຕູຢູ່ແນວຫລັງ ແບ່ງຈຳນວນໜຶ່ງເປັນຫລັກແຫລ່ງນຳພາທະຫານເມືອງ ແລະ ກອງຫລອນສະກັດລັດຕີ ແລະ ຫລອນຕີ ທີ່ຕັ້ງຂອງສັດຕູຢູ່ແຕ່ລະບ່ອນ ເປັນເວລາຍາວນານ, ເຊິ່ງໄດ້ເຮັດໃຫ້ຄວາມສາມັກຄີ ຮ່ວມຮົບຂອງ ປະຊາຊົນ ຢູ່ເຂດລ້ອງຊານ ແລະ ຜາລະແວກຄັ້ງນີ້ ແມ່ນມີທັງທະຫານທ້ອງຖິ່ນ, ກອງຫລອນ ແລະ ປະຊາຊົນ ແຕ່ກຳລັງສູ້ຮົບສ່ວນໃຫຍ່ແມ່ນກອງຫລອນ ໄລຍະແຫ່ງການຕໍ່ສູ້ ຕ້ານການບຸກລຸກກວາດລ້າງ ດັ່ງກ່າວ ທາງແຂວງໄດ້ປຸກລະດົມ ໃຫ້ນຳໃຊ້ທຸກປະເພດອາວຸດ ທີ່ມີນັບແຕ່ໜ້າໜ້ອງ, ປືນແກັບ, ປືນເພິ້ງ ແລະ ປືນ ເຄິ່ງທັນສະໄໝຈຳນວນໜຶ່ງ ຕີຕ້ານກັບສັດ ຕູຢ່າງດຸເດືອດ, ຢູ່ທາງພາກພື້ນດິນ ສັດຕູໄດ້ໃຊ້ກຳລັງປິດລ້ອມປະຊາຊົນ ແຕ່ລະບ້ານ ບໍ່ໃຫ້ ອອກຊອກຢູ່ຫາກິນໄດ້ ຢູ່ເທິງອາກາດຍິນຊ້ຳພັດຖິ້ມລະເບີດ ແລະ ຢາພິດລົງໃສ່ຢ່າງລຸນຕິດ ປະຊາຊົນໄດ້ຂາດເຂົ້າກິນ, ເກືອກິນ ແລະ ຢາປິ່ນປົວພະຍາດກໍຂາດເຂີນ, ປະຊາຊົນຈຳເປັນ ຕ້ອງໄດ້ກິນເຜືອກກິນມັນ ແລະ ກິນຮອດເປືອກໄມ້ຕາງເຂົ້າ, ຄວາມເຈັບເປັນນັບມື້ນັບເພີ່ມຂຶ້ນ ສຸຂະພາບຂອງປະຊາຊົນ ສ່ວນຫລາຍຖືກຈ່ອຍຜອມຈົນເຫັນແຕ່ຮ່າງກະດູກ, ແມ່ຍິງກໍບໍ່ມີຮອດ ເຕົ້ານົມ. ແຕ່ລະມື້ ປະຊາຊົນ ໄດ້ຊອກວິທີຫລົບຫລີກລູກປືນ ແລະ ຮ່າລະເບີດຂອງສັດຕູ. ຊອກ ຫາອາຫານການກິນຢູ່ຕາມປ່າ ແລະ ທັງລັດຕີສັດຕູໄປພ້ອມໆ ກັນ ຄື: ຜູ້ຍິງທາງຫລັງເຈ່ຍລູກ ມືຈັບດ້າມສຽມ ແລະ ມີດພ້າ ຫາຊຸດເຜືອກຊຸດມັນ, ສຳລັບຜູ້ຊາຍມືໜຶ່ງກຳສຽມ ເພື່ອຫາຊຸດ ເຜືອກມັນ ອີກມືໜຶ່ງກຳປືນ ເພື່ອຕໍ່ສູ້ຕ້ານການກວາດລ້າງ ແລະ ການຍິງທຳລາຍທາງອາກາດ ຂອງສັດຕູ, ຜ່ານໄລຍະຕໍ່ສູ້ ແຕ່ຕົ້ນປີ 1967 ຫາ ທ້າຍປີ 1968 ປະຊາຊົນ ຈຳນວນ 80 ຄອບ ຄົວໄດ້ຖືກລົ້ມຕາຍຫາຍຈາກ ຍ້ອນຄວາມອຶດຢາກ ແລະ ຖືກຢາພິດເຄມີຂອງສັດຕູ, ເຖິງແມ່ນ ວ່າ: ຄວາມອຶດຢາກສຸຂະພາບອ່ອນເພຍ ແລະ ການສູນເສຍລົ້ມຕາຍ ໄດ້ເກີດມີຂຶ້ນຢ່າງຫລວງ ຫລາຍ ຄືແນວນັ້ນກໍຕາມແຕ່ ເພື່ອອິດສະຫລະພາບ, ຄວາມຢູ່ເຢັນເປັນສຸກຂອງປະເທດຊາດ ກຳລັງປະກອບອາວຸດ ແລະ ປະຊາຊົນໃນຂົງເຂດ ດັ່ງກ່າວ ກໍບໍ່ໄດ້ທໍ້ຖອຍ ແລະ ຍອມຈຳນົນຕໍ່

ສັດຕູແຕ່ຢ່າງໃດ, ເຂົາເຈົ້າໄດ້ອີງໃສ່ທ່າໄດ້ປຽບ ທີ່ເປັນຜູ້ຮູ້ພື້ນຖານພູມີປະເທດດີກວ່າ ຍ້ອນເຄີຍຢູ່ພູຜາປ່າດົງ ແລະ ເຄີຍກິນເຜືອກກິນມັນມາແລ້ວນັ້ນ ເຂົາເຈົ້າຈຶ່ງມີຄວາມໝັ້ນໝຽວທົນທານ ອີງໃສ່ພູມີປະເທດ ເຂດທຸລະກັນດານນັ້ນ ພ້ອມກັນຕັດສິນໃຈບຸກຕີສັດຕູຢ່າງເດັດດ່ຽວໝຽວແໜ້ນ, ສ່ວນກຳລັງທະຫານຂອງສັດຕູທີ່ບໍ່ເຄີຍຢູ່ປ່າຢູ່ພູ ດິນນານມາຈັກເທື່ອນັ້ນ ເມື່ອໄດ້ໄປປະຈຳຢູ່ເຂດພູຜາປ່າດົງ ເປັນເວລາຍາວນານຄືແນວນີ້ ກໍເກີດເຈັບປ່ວຍໄຂ້ລຶ້ມຕາຍຢ່າງຫລວງຫລາຍ ແລະ ກໍເກີດມີແນວຄິດທໍ້ຖອຍ ບໍ່ຢາກຢູ່ເຄື່ອນໄຫວສູ້ຮົບຕໍ່ໄປອີກ, ຝ່າຍປະຕິວັດໄດ້ອາໄສທ່າໄດ້ປຽບ ແລະ ກາລະໂອກາດອັນເໝາະສົມນີ້ ສະກັດລັດຕີຢູ່ຕາມຮ່ອມຫ້ວຍພູເຂົາຕ່າງໆ ເພື່ອບັ່ນທອນກຳລັງຂອງສັດຕູ ເທື່ອລະເລັກ ເທື່ອລະໜ້ອຍ ພ້ອມກັນນັ້ນ ກໍຫລອນບຸກເຂົ້າຕີພວກເຂົາຢູ່ຕາມຈຸດທີ່ຕັ້ງຕ່າງໆ ຢ່າງຕັ້ງໜ້າຈົນວ່າ: ໃນທີ່ສຸດກຳລັງຂອງສັດຕູຖືກດັບສູນຢ່າງຫລວງຫລາຍ ຈຳນວນໜຶ່ງທີ່ເຫລືອ ຕາຍກໍແຕກທັບຖອຍໜີຢ່າງຊະຊາຍເຂົ້າຕົວເມືອງ. ສ່ວນກຳລັງປະຕິວັດ ພວກເຮົາສາມາດປົກປັກຮັກສາທີ່ໝັ້ນ ຂອງການປະຕິວັດເຂດ ດັ່ງກ່າວ ໄວ້ໄດ້ຢ່າງໝັ້ນຄົງ.


ຜ່ານການເຄື່ອນໄຫວຕໍ່ສູ້ອັນພິລະອາດຫານ ທໍລະຫົດອົດທົນ ຂອງກຳລັງປະກອບອາວຸດ ແລະ ປະຊາຊົນ ນະຄອນຫລວງວຽງຈັນ ເພື່ອຕ້ານສົງຄາມພິເສດ ແລະ ສົງຄາມພິເສດ ເພີ່ມທະວີຂອງຈັກກະພັດອາເມລິກາ ແຕ່ປີ 1963 - 1973 ເປັນເວລາ10 ປີ ສາມາດຍາດໄດ້ຜົນງານອັນໃຫຍ່ຫລວງ ປົກປັກຮັກສາເຂດທີ່ໝັ້ນປະຕິວັດໄວ້ໄດ້ຢ່າງໝັ້ນຄົງ ແລະ ຕີບັ່ນທ່ອນກຳລັງຂອງສັດຕູ ຄື:

ຕີສັດຕູທັງໝົດ 70 ຄັ້ງ ໃນນັ້ນສະກັດຕີຕາມເສັ້ນທາງຕ່າງໆ 31 ຄັ້ງ, ບຸກໂຈມຕີປົດຄ້າຍຕ່າງໆ 39 ຄັ້ງ, ຂ້າສັດຕູຕາຍ 1.025 ຄົນ ແລະ ບາດເຈັບຈຳນວນໜຶ່ງ, ຈັບໄດ້ ແລະ ອອກມາຍອມ 66 ຄົນ, ທຳລາຍລົດ 48 ຄັນ, ທຳລາຍປືນໃຫຍ່ 21 ກະບອກ, ຍຶດປືນເລັກຍາວ 114 ກະບອກ ແລະ ລູກປືນ 35.000 ລູກ, ໂຟນີ 1 ເຄື່ອງ, ຍິງຍົນເອເລກອບແຕຕົກ 1 ລຳ, ເປ່ເພ 1 ລຳ, ທຳລາຍຮາບກ້ຽງ ສາງອາວຸດໃຫຍ່ 1 ແຫ່ງ ຢູ່ຫລັກ 21.

4. ໄລຍະປະຕິບັດສັນຍາເຊີແນວ ແລະ ສັນຍາວຽງຈັນ ເຖິງການຍຶດອຳນາດ ແຕ່ປີ 1973 ເຖິງປີ 1975.

ທ້າຍປີ1972, ພາຍຫລັງທ່ີກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ທັບມ້າງການຫລອນຕີຍຸດທະສາດ ດ້ວຍເຮືອບິນເບ 52 ແລະ ເຮືອບິນ ສູ້ຮົບທີ່ທັນສະໄໝຊະນິດຕ່າງໆ ຂອງອາເມລິກາ ເຂົ້າຮ່ວມໂມ້ຍ ແລະ ຮາຍຟອງ ໃຫ້ປະລາໄຊລົງແລ້ວ ຈັກກະພັດອາເມລິກາ ຈຶ່ງຍອມຢຸດຕິການຖິ້ມລະເບີດຍິງທຳລາຍ ແລະ ຢຸດເຊົາການປິດລ້ອມ ພາກເໜືອ ຫວຽດນາມ, ວັນທີ 27

ເດືອນ ມັງກອນປີ 1973 ສັນຍາປາຣີ ກ່ຽວກັບ ຫວຽດນາມ ໄດ້ຮັບການລົງນາມ. ກອງທະຫານອາເມລິກາ ແລະ ກອງທະຫານ ປະເທດບໍລິວານຂອງອາເມລິກາ ຕ້ອງຖອນອອກຈາກພາກໃຕ້ ຫວຽດນາມ. ສຳລັບຢູ່ລາວກອງທັບ ແລະ ປະຊາຊົນ ເຮົາໄດ້ທັບມ້າງທຸກບັ້ນບຸກຕີບຽດຢຶດຂອງ ຈັກກະພັດອາເມລິກາ ແລະ ກຳລັງຝ່າຍຂວາ (ໝາຍເຖິງຝ່າຍລາຊະອານາຈັກວຽງຈັນ) ເຂົ້າ ເຂດປົດປ່ອຍ, ປະຊາຊົນໃນຫລາຍທ້ອງຖິ່ນ ໄດ້ລຸກຂຶ້ນຕໍ່ສູ້ຢ່າງເປັນຂະບວນ ທວງໃຫ້ຢຸດຕິສົງ ຄາມ, ຟື້ນຟູສັນຕິພາບ. ວັນທີ 21 ເດືອນ ກຸມພາ ປີ 1973, ສັນຍາວ່າດ້ວຍການຟື້ນຟູສັນຕິ ພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ ໄດ້ຮັບການລົງນາມ. ສັນຍາໄດ້ຮັບ ຮອງເອົາບັນດາສິດພື້ນຖານແຫ່ງຊາດ ແລະ ສິດຕັດສິນດ້ວຍຕົນເອງຂອງປະຊາຊົນລາວ, ຮັບຮູ້ ເຂດປົດປ່ອຍຂອງບັນດາກຳລັງຮັກຊາດ, ຢຸດຕິສົງຄາມ, ຢຸດເຊົາທຸກໆການຕິດພັນທາງການ ທະຫານກັບຕ່າງປະເທດ, ເຮັດໃຫ້ນະຄອນຫລວງວຽງຈັນ ແລະ ຫລວງພະບາງ ເປັນ ນະຄອນ ເປັນກາງ, ຈັດຕັ້ງລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງ ແຫ່ງຊາດ. ຄຳສັ່ງຢຸດຍິງຢູ່ທົ່ວດິນແດນລາວ ມີຜົນສັກສິດນັບແຕ່ເວລາ 12 ໂມງ 00 ນາທີຂອງ ວັນ ທີ 22 ເດືອນ ກຸມພາ ປີ 1973 ເປັນຕົ້ນມາ.



ນັກຮຽນ, ນັກສຶກສາ ເດີນຂະບວນປະທ້ວງ ແລະ ຂັບໄລ່ຈັກກະພັດອາເມລິກາ ແລະ ລູກມືຂາຍຊາດ 1973


ສັນຍາວຽງຈັນ ປີ 1973 ໄດ້ເຮັດໃຫ້ສົງຄາມຢູ່ລາວແກ່ຍາວເກືອບ 21 ປີ ນັ້ນສິ້ນສຸດລົງ. ນີ້ເປັນໄຊຊະນະ ທີ່ມີຄວາມໝາຍຍຸດທະສາດ ຂອງປະຊາຊົນລາວ. ເປັນພື້ນຖານດ້ານກົດໝາຍ ໃຫ້ແກ່ການຟື້ນຟູສັນຕິພາບ, ສ້າງຄວາມຖືກຕ້ອງປອງດອງຊາດ ແລະ ຄວາມເປັນເອກະລາດ

ຂອງຊາດລາວ. ສ້າງເງື່ອນໄຂອັນສະດວກ ໃຫ້ແກ່ການຍາດເອົາໄຊຊະນະສົມບູນ ໃນພາລະກິດ ປະຕິວັດຊາດ ປະຊາທິປະໄຕ ຂອງປະຊາຊົນລາວ ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິ ວັດລາວ, ພ້ອມກັນນັ້ນ ກໍເປັນການປະລາໄຊຢ່າງສິ້ນເຊີງຂອງສົງຄາມ ພິເສດເພີ່ມທະວີຢູ່ລາວ ຕາມທິດສະດີ ນິກເຊິນ ຂອງຈັກກະພັດອາເມລິກາ.


ຕາມສັນຍາວຽງຈັນ ທີ່ໄດ້ລົງນາມກັນ, ສະຫະລັດອາເມລິກາ ຕ້ອງຖອນທີ່ປຶກສາ ແລະ ກຳລັງທະຫານທັງໝົດ ຂອງພວກເຂົາອອກຈາກລາວ, ແຕ່ພວກເຂົາຍັງບ່ຍອມປະລະກົນອຸບາຍ ສືບຕໍ່ຮັກສາລັດທິລ່າເມືອງຂຶ້ນແບບໃໝ່ຢູ່ລາວ, ພວກເຂົາໄດ້ຄົບຄິດ ກັບບັນດາອິດທິກຳລັງປະ ຕິການ ແລະ ໃຊ້ລູກມືຂອງເຂົາລະເມີດສັນຍາວຽງຈັນ, ສືບຕໍ່ຖິ້ມລະເບີດຍິງທຳລາຍ ແລະ ເປີດ ບັ້ນບຸກຕີບຽດຢຶດ ເອົາເຂດປົດປ່ອຍຂອງ ບັນດາກຳລັງຮັກຊາດ. ພວກເຂົາໃຊ້ທະຫານ, ຕຳ ຫລວດ ເກາະຜິດນາບຂູ່ ພະນັກງານ ຂອງແນວລາວຮັກຊາດ ທີ່ເຂົ້າໄປເຈລະຈາກັບຝ່າຍ ວຽງ ຈັນ. ຮ້າຍແຮງກວ່ານັ້ນ ວັນທີ 20 ສິງຫາ 1973, ອາເມລິກາໄດ້ໃຊ້ພວກລູກມືຂວາຈັດ ຈາກດິນ ໄທ ເຂົ້າມາເຮັດລັດຖະປະຫານຢູ່ວຽງຈັນ, ໝາຍຈະລົບລ້າງສັນຍາວຽງຈັນ ແລະ ນ້າງການປະ ຕິບັດສັນຍາດັ່ງກ່າວ. ແຕ່ການລັດຖະປະຫານນັ້ນຖືກກຳລັງຮັກຊາດ ແລະ ປະຊາຊົນ ວຽງຈັນ ດັບມອດໃນທັນທີ.

ຕໍ່ໜ້າສະພາບການດັ່ງກ່າວ ໂດຍພາຍໃຕ້ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ ປະຊາຊົນລາວ ກໍຄືຊາວ ນະຄອນຫລວງວຽງຈັນ ກໍໄດ້ສາມັກຄີກັນຢູ່ອ້ອມຂ້າງສູນກາງພັກ - ຄະ ນະພັກຂອງ ນະຄອນຫລວງວຽງຈັນ ພ້ອມກັນລຸກຮື້ຂຶ້ນຕໍ່ສູ້ ປະຕິບັດມະຕິຄຳສັ່ງ; ແຜນຍຸດທະ ສາດຍຸດໂທບາຍ ແລະ ວິທີປະຕິວັດໃນການຍຶດອຳນາດຂອງພັກ ປະຊາຊົນ ປະຕິວັດລາວ, ປັດ ສະຈາກການນອງເລືອດ ແຕ່ມີໄຊຊະນະຮອບດ້ານ, ເປັນໜ້າມະຫັດສະຈັນໃຫຍ່ຫລວງ ໃນຄັ້ງ ນັ້ນ ຢ່າງຕັ້ງໜ້າ ແລະ ໄດ້ເປັນເຈົ້າການຕໍ່ສູ້ທາງດ້ານການເມືອງ ແລະ ກົດໝາຍດ້ວຍການສະ ໜັບສະໜູນ ໃຫ້ມີການປະຕິບັດສັນຍາ ວ່າດ້ວຍ: ການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມ ຖືກຕ້ອງປອງດອງຊາດ ທີ່ໄດ້ຕົກລົງເຊັນກັນລະຫວ່າງ ແນວລາວຮັກຊາດ ແລະ ຝ່າຍລັດຖະ ບານລາຊະອານາຈັກ ຄັ້ງວັນທີ 21 ເດືອນ ກຸມພາ ປີ 1973 ແລະ ອະນຸສັນຍາ ທີ່ໄດ້ເຊັນກັນ ໃນ ວັນທີ 14 ເດືອນ ກັນຍາ ປີ 1973 ໃຫ້ຄົບຖ້ວນ, ພາຍຫລັງທີ່ ຄະນະມົນຕີ ປະສົມການເມືອງ ແລະ ລັດຖະບານປະສົມສອງຝ່າຍ ໄດ້ຈັດຕັ້ງຂຶ້ນ ໃນວັນທີ 5 ເດືອນ ເມສາ ປີ 1974 ນັ້ນແລ້ວ, ຄະນະມົນຕີ ປະສົມການເມືອງ ໄດ້ວາງໂຄງການການເມືອງ 18 ຂໍ້ອອກ ເພື່ອໃຫ້ລັດຖະບານ ປະສົມ ກໍຄືປວງຊົນທັງຊາດ ໄດ້ປະຕິບັດມາຮອດໄລຍະນີ້ ພາຍໃຕ້ການຊີ້ນຳ - ນຳພາຂອງ ຄະນະພັກ ນະຄອນຫລວງວຽງຈັນ ຊາວນະຄອນຫລວງວຽງຈັນ ທຸກຊັ້ນຄົນໄດ້ພ້ອມກັນຕັ້ງໜ້າ ເສີມຂະຫຍາຍຄວາມເປັນເຈົ້າການ, ພ້ອມກັນກັບປະຊາຊົນລາວ ໃນທົ່ວປະເທດ ຊຸກຍູ້ການປະ ຕິບັດຟື້ນຟູສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ໄດ້ປະກົດຜົນເປັນຈິງໂດຍໄວ ດ້ວຍ

ການສະໜັບສະໜູນ ທຸກຖະແຫລງການຂອງຝ່າຍແນວລາວຮັກຊາດ ທີ່ປະກາດອອກເດັດດ່ຽວ ຄັດຄ້ານ ແລະ ກ່າວປະນາມເຈດຈຳນົງ ຫວັງມ້າງເພທຳລາຍສັນຍາ ຂອງຝ່າຍລາຊະອານາຈັກ ວຽງຈັນ ຕໍ່ເນື້ອໃນສັນຍາ ກໍຄືໂຄງການ ການເມືອງ 18 ຂໍ້ ຂອງພັກຢ່າງເດັ່ງຂຶ້ມ, ມາຮອດວັນທີ 7 ເດືອນ ພຶດສະພາ ປີ1974, ຊາວໜຸ່ມ, ນັກຮຽນ ນັກສຶກສາ ຊາວນະຄອນຫລວງວຽງຈັນ ຫຼາຍ ໝື່ນຄົນ ໄດ້ຫລັ່ງໄຫລອອກສູ່ຖະໜົນ ເດີນຂະບວນຮ້ອງຄຳຂວັນ “ ສັນຕິພາບ, ຄວາມຖືກຕ້ອງ ປອງດອງຊາດໝັ້ນຍືນ ສະໜັບສະໜູນ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະ ນິນຕີປະສົມການເມືອງແຫ່ງຊາດ ” “ ໂຄ່ນລົ້ມພວກປະຕິການດີ້ດ້ານທຳລາຍສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ” ໆລໆ.



ບັນດາກຳລັງຮັກຊາດເຂົ້າສອງຕິວເມືອງເປັນກາງ ວຽງຈັນ-ຫຼວງພະບາງ
ຕາມສັນຍາ ຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ



ຄະນະມົນຕີ ປະສົມການເມືອງ ແຫ່ງຊາດ 5/4/1974

ມາຮອດເດືອນ ພະຈິກ ປີ 1974 ສູນກາງພັກໄດ້ມີມະຕິວ່າດ້ວຍ: ໜ້າທີ່ການເມືອງ ແລະ ຈຸດໝາຍສະເພາະໜ້າ, ມະຕິເວົ້າແຈ້ງວ່າ: " ຕ້ອງເດັດດ່ຽວຕໍ່ສູ້ ເພື່ອລົບລ້າງການຄອບງຳຂອງ ຈັກກະພັດອາເມລິກາ; ຍາດແຍ່ງ, ຜັນແຍກກຳລັງຝ່າຍຂວາ (ໝາຍເຖິງຝ່າຍລາຊະອານາຈັກ), ເຮັດໃຫ້ພວກປະຕິການຂວາຈັດຖືກໂດດດ່ຽວ, ຫັນປ່ຽນກອງທະຫານຝ່າຍວຽງຈັນ ເທື່ອລະກ້າວ ເຮັດໃຫ້ກຳລັງສູ້ຮົບຂອງພວກເຂົາຊຸດໂຊມລົງ, ເດັດຂາດບໍ່ປະໃຫ້ພວກປະຕິການຂວາຈັດ ໃຊ້ ກອງທະຫານຂອງເຂົາ ໂຄ່ນລົ້ມລັດຖະບານປະສົມ ແລະ ກໍ່ການປະທະກັນດ້ວຍກຳລັງອາວຸດ, ຕໍ່ສູ້ເຮັດໃຫ້ກົງຈັກການປົກຄອງ ຝ່າຍວຽງຈັນ ແຕ່ເທິງລົງຮອດຮາກຖານອ່ອນເພຍເປ້ຍລ່ອຍ ".

ໂດຍຈັດຕັ້ງຜັນຂະຫຍາຍມະຕິດັ່ງກ່າວນັ້ນ ຄະນະພັກນະຄອນຫລວງວຽງຈັນ ໄດ້ອອກ ແຮງປຸກລະດົມຂະບວນການຂອງມະຫາຊົນຢູ່ພາຍໃນແຂວງ ພ້ອມກັນຍົກສູງຄົນທຸງສັນຕິພາບ, ເອກະລາດ, ປະຊາທິປະໄຕ ຄວາມຖືກຕ້ອງປອງດອງ ແລະ ເອກະພາບຂອງຊາດຍາດ ແຍ່ງທຸກ ກຳລັງທີ່ສາມາດຍາດແຍ່ງໄດ້, ພ້ອມກັນນັ້ນຍັງສວຍໃຊ້ຄວາມຂັດແຍ່ງລະຫວ່າງພັກຝ່າຍຕ່າງໆ ໃນຝ່າຍຂວາວຽງຈັນ ເພື່ອຍາດແຍ່ງ ແລະ ຜັນແຍກກຳລັງຂອງພວກເຂົາ, ຜ່ານການປຸກລະດົມ ດັ່ງກ່າວ ຂະບວນການຕໍ່ສູ້ຂອງມະຫາຊົນ ຊາວນະຄອນຫລວງວຽງຈັນ ໄດ້ນັບມື້ແຜ່ຂະຫຍາຍ ກ້ວາງອອກ ແລະ ຟົດເດືອດຂຶ້ນເລື້ອຍໆ ຈາກການຕໍ່ສູ້ ເພື່ອຄວາມຍຸດຕິທຳ ທວງເອົາສິດໃນ

ການດຳລົງຊີວິດ ເພື່ອສັນຕິພາບ, ສິດປະຊາທິປະໄຕ, ກ້າວຂຶ້ນເຖິງການລຸກຮື້ຂຶ້ນ ພ້ອມກັບປະຊາຊົນ ທົ່ວປະເທດ ຕໍ່ສູ້ຢຶດອຳນາດການປົກຄອງ ເປັນແຕ່ລະພາກສ່ວນ ຄື:



ກົມການເມືອງ ສູນກາງພັກ ປະຊຸມວາງແຜນ ຢຶດອຳນາດທົ່ວປະເທດ ປີ 1975

ວັນທີ 1 ເດືອນ ພຶດສະພາ ປີ 1975 ຢູ່ນະຄອນຫລວງວຽງຈັນ, ເພື່ອເປັນການສະເຫລີມສະຫລອງ ວັນກຳມະກອນ ສາກົນ ຄັ້ງທຳອິດຢູ່ວຽງຈັນ, ສະຫະພັນແຮງງານລາວ ແລະ ອົງການຈັດຕັ້ງມະຫາຊົນ, ໂດຍພາຍໃຕ້ການຊີ້ນຳຂອງພັກ ປະຊາຊົນ ປະຕິວັດລາວ. ປະຊາຊົນຜູ້ອອກແຮງງານ, ຊາວກຳມະກອນ, ນັກຮຽນ, ນັກສຶກສາ ຂ້າຣາຊະການ 2 ໝື່ນກວ່າຄົນ ໄດ້ພາກັນເດີນຂະບວນ ສະແດງກຳລັງໄປຕາມທ້ອງຖະໜົນ ມຸ້ງໜ້າໄປສະຖານທູດອາເມລິກາ ທວງໃຫ້ໂຄ່ນລົ້ມພວກປະຕິການຂວາຈັດ ທີ່ກຳອຳນາດການປົກຄອງ ແລະ ໃນກອງທະຫານຂອງຝ່າຍຂວາ ວຽງຈັນ ທວງໃຫ້ຢຸດຕິການເຄື່ອນໄຫວຂອງອົງການ ຢູເສດ (USIAD) ຂອງອາເມລິກາ ຢູ່ລາວ.

ວັນທີ 5 ພຶດສະພາ ປີ 1975, ກົມການເມືອງສູນກາງພັກ ໄດ້ຕົກລົງຢຶດອຳນາດການປົກຄອງໃນທົ່ວປະເທດ. ເພື່ອປະຕິບັດຕາມການຕົກລົງຂອງສູນກາງພັກ ໃນວັນທີ 9 ພຶດສະພາ ປີ 1975 ຊາວນະຄອນຫລວງວຽງຈັນ ປະມານ 12.000 ຄົນ ເຊິ່ງລວມທັງກຳມະກອນ, ຊາວນາ ຂ້າລາຊະການ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ ປັນຍາຊົນ ໄດ້ພ້ອມກັນໂຮມຊຸມນຸມ ຄັດຄ້ານກ່າວປະນາມ ພວກຫຸ່ນຂວາຈັດວຽງຈັນ, ທ່ວງໃຫ້ປົດຕຳແໜ່ງບັນດາລັດຖະມົນຕີ 5

ທ່ານ ຄື: ສີສຸກນະຈຳປາສັກ, ໄຽ່ນ ສະນະນິກອນ, ຄຳໄຜ່ ອະໄພ, ທຸມພັນ ໄຊຍະສິດ ແລະ ຈັນ ທອນ ຈັນທະລາສີ. ທ່ວງໃຫ້ປິດຕ່ຳແໜ່ງ ບັນດານາຍທະຫານປະຕິການ ເຊັ່ນ: ກຸປະສິດອະໄພ, ອຸດອນ ຊະນະນິກອນ, ຄຳຮູ້ບຸດສະລາດ, ວ່າງປາວ, ລຸນສີ ສະນິນ ແລະ ທອງລິດ ໂຈກເບັ້ງ ບຸນ; ຮອດວັນທີ 10 ພຶດສະພາ ປີ 1975 ພວກຫຸ່ນຂາຍຊາດ ລູກແຫລ້ງຕີນມືອາເມລິກາ ຢ້ານ ກົວຕໍ່ກຳລັງມະຫາຊົນ ຈຳຕ້ອງໄດ້ພາກັນໂຕນໜີອອກຈາກປະເທດລາວໄປຕ່າງປະເທດ ໃນເວ ລາກາງຄືນ.





ຊາວນະຄອນຫລວງວຽງຈັນ ເດີນຂະບວນຂັບໄລ່ ແລະ ໂຄ່ນລົ້ມ ພວກລັດຖະບານຫຸ່ນວຽງຈັນ ລູກແຫລ່ງຕີນມືຊັ້ນຈຳອາເມລິກາ 9/5/1975



ການລຸກຮື້ຂຶ້ນຂອງນັກຮຽນ ນາຍຮ້ອຍ ຢູ່ຄ້າຍ ຈີ່ນາຍໂມ້ 11. 5. 1975

ວັນທີ 11 ເດືອນ ພຶດສະພາ ປີ 1975 ນັກຮຽນນາຍຮ້ອຍ ທີ່ໂຮງຮຽນ ຈີ່ນາຍໂມ້ ໄດ້ລຸກຮື້ຂຶ້ນຮຽກຮ້ອງ ເອົາທະຫານຝ່າຍປະເທດລາວ ໄປຕັ້ງຄ້າຍຢູ່ ຈີ່ນາຍໂມ້ ເຮັດໃຫ້ເສັ້ນແບ່ງເຂດ ນະຄອນເປັນກາງ ວຽງຈັນ ຖືກຝ່ງທະລາຍລົງ ແລະ ກຳລັງແນວລາວຮັກຊາດ ສາມາດຄວບຄຸມ ຕົວເມືອງ ນະຄອນຫລວງວຽງຈັນ ໄດ້ທັງໝົດ.

ວັນທີ 23 ເດືອນ ພຶດສະພາ ປີ 1975 ນັກຮຽນ, ນັກສຶກສາ, ຂ້າຣາຊະການ ແລະ ປະຊາຊົນ ຊາວນະຄອນຫລວງວຽງຈັນ ໝື່ນກວ່າຄົນ ໂດຍພາຍໃຕ້ການນຳພາຂອງສະຫະພັນ ນັກສຶກສາ ໄດ້ດຳເນີນການປິດລ້ອມຍຶດເອົາ ອົງການ ຢູເສດ (USIAD) ເຊິ່ງເປັນສູນບັນຊາການ ຂອງອາເມລິກາ ຢູ່ນາໄຮ່ດຽວ ແລະ ກົງຈັກບໍລິຫານ ຂອງເຂົາຢູ່ຫ້ວຍ 6 ກໍຄືບ່ອນຕ່າງໆ ໃນ ນະຄອນຫລວງວຽງຈັນ ພ້ອມໆກັນ, ທວງໃຫ້ເຂົາໜີອອກຈາກລາວ ພາຍໃນກຳນົດເວລາ 5 ວັນ 5 ຄືນ. ຕໍ່ໜ້າກຳລັງແຮງຂອງມະຫາຊົນ ລຸກຮື້ຂຶ້ນຂັບໄລ່ໃສ່ຫົວພວກເຂົາຢ່າງຕໍ່ເນື່ອງ, ມາໃນວັນທີ 27 ເດືອນ ພຶດສະພາ ປີ 1975 ສະຖານທູດອາເມລິກາ ຈຳຕ້ອງຍອມຮັບຍຸບອົງການ ດັ່ງກ່າວ. ກົງຈັກລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາຢູ່ລາວ ທັງໝົດຖືກລົບລ້າງ ແລະ ຕອນກາງຄືນ ວັນທີ 27 ເດືອນ ພຶດສະພາ ປີ 1975 ນັ້ນ ພວກອາເມລິກາ ທັງໝົດທີ່ຢູ່ ນະຄອນຫລວງວຽງຈັນ ໄດ້ຫອບເອົາຄອບຄົວຂອງເຂົາ ຂຶ້ນຍົນທີ່ເດີ່ນບິນວັດໄຕ ປົບໜີໄປປະເທດໄທ.

ວັນທີ 24 ເດືອນ ພຶດສະພາ ປີ 1975 ກຳລັງປະກອບອາວຸດ ທີ່ປະກອບດ້ວຍທະຫານທ້ອງຖິ່ນ ແລະ ກອງໜູນຂອງ ແຂວງ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບກຳລັງໜວງຂອງຝ່າຍປະເທດລາວ ເຄື່ອນທັບເຂົ້າຢຶດ ພູພະ ແລະ ສ່ວນໜຶ່ງເຂົ້າມາທາງດ່ານສູງ ເພື່ອຊ່ວຍໜູນໃຫ້ແກ່ຂະບວນການລຸກຮື້ຂຶ້ນຢຶດອຳນາດ ຂອງປະຊາຊົນຢູ່ແຕ່ລະເມືອງ ແລະ ໃຈກາງນະຄອນຫຼວງວຽງຈັນ.



ສຳນັກງານຢູ້ເຊດ(USIAD) ຂອງອາເມລິກາ ຢູ່ລາວ ກ່ອນວັນຢຶດອຳນາດ



ກຳລັງທະຫານຂອງຝ່າຍປະເທດລາວ ເຄື່ອນທັບເຂົ້າສູ່ຕົວເມືອງຕ່າງໆ ຕາມຄຳຮຽກຮ້ອງຂອງປະຊາຊົນ

ວັນທີ 28 ເດືອນ ພຶດສະພາ ປີ 1975 ທະຫານຝ່າຍຂວາວຽງຈັນ 1 ກອງພັນ ໄດ້ລຸກຮື້ຂຶ້ນ ຢຶດອຳນາດຢູ່ຫຼັກ 5 ວຽງຈັນ ກອງພັນ ດັ່ງກ່າວ ແມ່ນກຳລັງທີ່ໄວ້ເນື້ອເຊື່ອໃຈຂອງພວກເຂົາ ເຊິ່ງ ບັນຊາໂດຍພັນເອກ ລຸນສີສຸນິນ ຫົວໜ້າເຊອີອາ ຂອງອາເມລິກາ, ເມື່ອເຫັນວ່າ ສະພາບການ ການເມືອງເປັນຄືດັ່ງກ່າວ ທີ່ບໍ່ມີຜົນດີໃຫ້ພວກເຂົານັ້ນ, ບັນດາພວກນາຍທະຫານຊັ້ນນາຍພົນ ຂອງຝ່າຍຣາຊະອານາຈັກວຽງຈັນ ໄດ້ພ້ອມກັນມາປະຊຸມຢູ່ເຮືອນຂອງນາຍພົນ ບຸນປອນ ມາກ ເທພາລັກ ໃນກາງຄືນວັນທີ 8 ເດືອນ ມິຖຸນາ ປີ 1975 ເຂົາໄດ້ປຶກສາກັນວ່າ: ຈະສູ້ກັບກຳ ລັງ ປະຕິວັດ ຫຼື ຖອຍສ່ວນຫຼາຍໄດ້ມີຄຳເຫັນ ວ່າ: ປະຈຸບັນນີ້ " ໃສ້ຢູ່ທ້ອງກາຍເກີດເປັນໜອນ ເຫັນ ວ່າ: ຈະສູ້ບໍ່ໄດ້ " ໝາຍເຖິງຄົນເຂົາຕ້ານເຂົາຄົນແລ້ວ ທີ່ປະຊຸມກໍໄດ້ເລີກລາໜີໄປຄົນລະທາງ.



ກຳລັງທະຫານຝ່າຍລັດຖະບານຫຸ່ນວຽງຈັນ ຂັດຂືນຄຳສັ່ງຂອງຜູ້ບັງຄັບບັນຊາ ຫັນໜ້າມາຫາກຳລັງປະຕິວັດ

ໂດຍສືບຕໍ່ປະຕິບັດມະຕິ ຂອງກົມການເມືອງສູນກາງພັກ ກ່ຽວກັບການຢຶດອຳນາດ, ຄະ ນະພັກທຸກຂັ້ນ ແລະທຸກແຂວງໄດ້ນຳ ພາມະຫາຊົນລຸກຮື້ຂຶ້ນຢຶດເອົາສິດເປັນເຈົ້າ ແລະ ສ້າງ ຕັ້ງອຳນາດ ການປົກຄອງ ປະຕິວັດຂຶ້ນໃນແຕ່ລະທ້ອງຖິ່ນຕ່າງໆຄື: ວັນທີ 17 ເດືອນ ມິຖຸນາ ປີ 1975. ປະຊາຊົນ ແຂວງ ບໍຄັນ (ແຂວງ ບໍລິຄຳໄຊ ປະຈຸບັນ) ໄດ້ລຸກຮື້ຂຶ້ນຢຶດອຳນາດການປົກ ຄອງ; ວັນທີ 20 ເດືອນ ມິຖຸນາ ປີ 1975 ແຂວງຊຽງຂວາງ ໄດ້ຮັບການປົດປ່ອຍຢ່າງສົມບູນ ກຳລັງພິເສດວາງປາວຖືກຍຸບ; ວັນທີ 3 ເດືອນ ກໍລະກົດ 1975, ປະຊາຊົນ ແຂວງ ຈຳປາສັກ ໄດ້ ໂຮມຊຸມນຸມມິດຕິງ ປະກາດລົບລ້າງ ອຳນາດການປົກຄອງຫຸ່ນ, ສ້າງຕັ້ງອຳນາດການປົກຄອງ




ກຳລັງທະຫານຂອງລັດຖະບານ ຫຸ່ນວຽງຈັນ ມອບອາວຸດໃຫ້ກຳລັງປະຕິວັດ ເຊົ້າສາໆ

ປະຕິວັດຂອງແຂວງຂຶ້ນ; ຕົ້ນເດືອນ ສິງຫາ ປີ 1975 ປະຊາຊົນ ແຂວງ ໄຊຍະບູລີ ໄດ້ສຳເລັດ ການຢຶດອຳນາດ ການປົກຄອງໃນທຸກຂັ້ນ. ວັນທີ 21 ເດືອນ ສິງຫາ ປີ 1975, ອຳນາດການປົກ ຄອງປະຊາຊົນຂອງ ແຂວງ ຫລວງພະບາງ ໄດ້ຮັບການສ້າງຕັ້ງຂຶ້ນ. ໂດຍກຳເອົາການລະໂອກາດ ປະຫວັດສາດ " ພັນປີມີເທື່ອໜຶ່ງ " ວັນທີ 23 ສິງຫາ ປີ 1975 ຊາວນະຄອນຫລວງວຽງຈັນ ຈຳ ນວນ 2 ໝື່ນກວ່າຄົນ ກໍໄດ້ພ້ອມກັນມາເຕົ້າໂຮມຊຸມນຸມນຶດຕິງໃຫຍ່ຢູ່ເດີ່ນ ພະທາດຫລວງ ປະ ກາດຢຶດອຳນາດ ລົບລ້າງລະບອບການປົກຄອງເກົ່າ ແລະ ສ້າງຕັ້ງອຳນາດການປົກຄອງປະຕິ ວັດຂັ້ນສູນກາງຂຶ້ນຢ່າງສະຫງ່າຜ່າເຜີຍ ເປັນອັນວ່າລະບອບລ່າເມືອງຂຶ້ນແບບໃໝ່ຂອງຈັກກະ ພັດອາເມລິກາທີ່ຄອບຄອງລາວ ກໍຄືຊາວນະຄອນຫລວງວຽງຈັນ ມາໄດ້ 21 ປີ ໄດ້ຖືກພັງທະ ລາຍລົງຢ່າງສິ້ນເຊີງນັ້ນ ແມ່ນໝາກຜົນ ກໍຄືໄຊຊະນະລວມຍອດ ຂອງການປະຕິວັດຊາດ ປະ ຊາທິປະໄຕ ພາຍໃຕ້ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ ໂດຍທ່ານ ປະທານ ໄກສອນ ພົມວິຫານ ເປັນຜູ້ນຳໜ້າ ດ້ວຍການນຳໃຊ້ 3 ບາດຄ້ອນ ຍຸດທະສາດ ບຸກຕີຢຶດອຳນາດ ໃນທົ່ວ ປະເທດມາໄດ້ຢ່າງສົມບູນ. 3 ບາດຄ້ອນນັ້ນມີ:

ບາດຄ້ອນທີ່ໜຶ່ງ: ແມ່ນກຳລັງລຸກຮື້ຂຶ້ນ ຢຶດອຳນາດການປົກຄອງ ຂອງມະຫາຊົນ.

ບາດຄ້ອນທີ່ສອງ: ແມ່ນກຳລັງແຍກຕົວອອກ ຂອງກອງທະຫານຝ່າຍຂວາວຽງຈັນ ແລ້ວ ມາຮ່ວມມືກັບກຳລັງຮັກຊາດ.

ບາດຄ້ອນທີ່ສາມ: ແມ່ນກຳລັງປະກອບອາວຸດປະຕິວັດ ເປັນກຳລັງໜູນໜີບ.



ໂຮມຊຸມນຸມໃຫຍ່ປະກາດຢຶດອຳນາດທົ່ວປະເທດ ທີ່ນະຄອນຫຼວງວຽງຈັນ ວັນທີ 23 ສິງຫາ ປີ 1975




ຂະບວນຢຶດອຳນາດທົ່ວ ນະຄອນຫລວງວຽງຈັນ ຈູດເຜົາ ຫຸ່ນຈຳລອງ
ຂອງຜູ້ກຳອຳນາດການປົກຄອງເກົ່າ ແຫ່ງຣາຊະອານາຈັກ ທີ່ຫຼ້າສະໄໝ



ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ປະກາດລົບລ້າງລະບອບລາຊາທິປະໄຕ ແຫ່ງລາຊະອານາຈັກລາວ
ທີ່ຫ້າສະໄໝ ແລະ ສະຖາປະນາ ລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ
ວັນທີ 2 ທັນວາ ປີ 1975. ຢູ່ນະຄອນຫລວງວຽງຈັນ



ຄະນະລັດຖະບານຊຸດທຳອິດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການຈັດຕັ້ງຂຶ້ນຢູ່
ນະຄອນຫລວງວຽງຈັນ



ທ່ານ ສຸພານຸວົງ ໄດ້ຮັບເລືອກເປັນປະທານ ປະເທດທັງ
ເປັນປະທານສະພາປະຊາຊົນສູງສຸດ

ບົນພື້ນຖານ ດັ່ງກ່າວນັ້ນ, ວັນທີ 1 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນ ປະຊາຊົນທົ່ວປະເທດ ເຊິ່ງມີບັນດາຕົວແທນ ທີ່ໄດ້ຮັບການເລືອກຕັ້ງ ຈາກການປ່ອນບັດ ຄັດເລືອກສະພາປະຊາຊົນແຂວງຕ່າງໆ ມາເຂົ້າຮ່ວມນັ້ນ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍທີ່ ນະຄອນຫຼວງວຽງຈັນ. ກອງປະຊຸມໃຫຍ່ໄດ້ຮັບຮອງເອົາໃບສະລະ ລາຊະສົມບັດຂອງເຈົ້າຊີວິດ, ໃບຂໍຍຸບຕົວຂອງຄະນະມົນຕີ ປະສົມການເມືອງ ແຫ່ງຊາດ ແລະ ລັດຖະບານ ປະສົມຊົ່ວຄາວແຫ່ງຊາດ. ກອງປະຊຸມໃຫຍ່ ໄດ້ເປັນເອກະສັນກັນຜ່ານບັນດາມະຕິອັນເປັນປະຫວັດການ: ຕົກລົງລົບລ້າງລະບອບ ລາຊາທິປະໄຕ ທີ່ຫຼ້າສະໄໝ ແລະ ສະຖາປະນາລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ, ສ້າງຕັ້ງສະພາປະຊາຊົນສູງສຸດ ແລະ ແຕ່ງຕັ້ງປະທານປະເທດໂດຍແມ່ນ ທ່ານ ສຸພານຸວົງ ເປັນປະທານ, ໃຫ້ເຈົ້າຊາຍ ວົງສະຫວ່າງ ເປັນທີ່ປຶກສາ; ສ້າງຕັ້ງລັດຖະບານ ແລະ ຄະນະລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໂດຍແມ່ນ ທ່ານ ໄກສອນ ພົມວິຫານ ເປັນນາຍົກລັດຖະມົນຕີ, ມີສະເດັດເຈົ້າ ສຸວັນນະພູມາ ເປັນທີ່ປຶກສາ; ກຳນົດທຸງຊາດ, ເພັງຊາດ ແລະ ພາສາທາງລັດຖະການ.



ທ່ານ ໄກສອນ ພົມວິຫານ ໄດ້ຮັບເລືອກເປັນນາຍົກລັດຖະມົນຕີ
ແຫ່ງ ສປປ ລາວ.

ວັນທີ 2 ທັນວາ 1975, ກອງປະຊຸມໃຫຍ່ ໄດ້ອັດລົງດ້ວຍຜົນສຳເລັດອັນສະຫງ່າລາສີທ່ວມທ້ຽງບັນຍາກາດແຫ່ງຄວາມຊື່ນຊົມຍິນດີຢ່າງສຸດອົກສຸດໃຈຂອງປະຊາຊົນບັນດາເຜົ່າລາວ ໃນທົ່ວປະເທດ ກໍຄືຂອງປະເທດອ້າຍນ້ອງ ແລະ ເພື່ອນມິດ ໃນທົ່ວທຸກ

ທະວີບ. ເຫດການປະຫວັດສາດ ອັນອັດສະຈັນ ດັ່ງກ່າວນັ້ນ ເປັນ ຂີດໝາຍແຫ່ງການສິ້ນສຸດລົງຂອງລະບອບ ລາຊາທິປະໄຕ ຢ່າງ ສົມບູນ ແລະ ມີໄຊຂອງການປະຕິວັດຊາດ - ປະຊາທິປະໄຕ ໃນ ປະເທດຂອງເຮົາ ແລະ ໄຂໄລຍະຂະຫຍາຍຕົວໃໝ່ ທີ່ຮຸ່ງເຮືອງ ສົດໃສທີ່ສຸດ ໃນປະຫວັດສາດຂອງຊາດເຮົາ: ໄລຍະທີ່ ປະຊາຊົນ ບັນດາເຜົ່າພວກເຮົາເປັນເຈົ້າຂອງປະເທດຊາດ, ເປັນເຈົ້າຊາຕາ ກຳຂອງຕົນຢ່າງແທ້ຈິງ,ກ້າວຂຶ້ນສູ່ເສັ້ນທາງອັນສະຫວ່າງສະໄຫວ ຂອງລັດທິສັງຄົມນິຍົມ ພາຍໃຕ້ການນຳພາຂອງພັກເຮົາ.



ທ່ານ ໝື່ນ ສົມວິຈິດ ປະທານ ຄະນະກຳມະການປົກຄອງ ກຳ ແພງນະຄອນວຽງຈັນ ຜູ້ທຳອິດ, ຜູ້ສ້າງຕັ້ງກອງຟ້າງຸ່ມ ປີ1947 ນຳ ພາຂະບວນການປະຕິວັດຂອງ ແຂວງ ວຽງຈັນ ຕ້ານລັດທິລ່າ ເມືອງຂຶ້ນແບບເກົ່າ ແລະ ແບບ ໃໝ່

ນັບແຕ່ວັນທີ 23 ສິງຫາ 1975 ເປັນຕົ້ນມາແຂວງ ແລະ ກຳ ແພງນະຄອນວຽງຈັນ ໄດ້ມີອຳນາດການປົກຄອງໃໝ່ ໂດຍແມ່ນ ຂອງປະຊາຊົນ ໄດ້ມາຈາກການຕໍ່ສູ້ຂອງປະຊາຊົນ ແລະ ເພື່ອ ສິດຜົນປະໂຫຍດຂອງປະຊາຊົນ ໂດຍພາຍໃຕ້ການນຳພາຂອງ ພັກ ປະຊາຊົນ ປະຕິວັດລາວ; ນະຄອນຫລວງວຽງຈັນ ໄດ້ລວມ ເອົາ 2 ແຂວງ ວຽງຈັນ ຕາເວັນອອກ ແລະ ແຂວງ ວຽງຈັນ ຕາເວັນຕົກ ເຂົ້າເປັນແຂວງດຽວກັນ ເອີ້ນວ່າ: “ ແຂວງ ກຳແພງນະຄອນວຽງຈັນ ”. ໂດຍພາຍໃຕ້ການນຳພາຂອງ ຄະນະປົກຄອງ ແຂວງ ກຳແພງນະຄອນວຽງຈັນ ຊຶ່ງມີ ທ່ານ ໝື່ນສົມວິຈິດ ເປັນປະທານ, ທ່ານ ເພົ້າ ພິມມະຈັນ ເປັນຮອງ.

ສັງລວມແລ້ວ:ໃນຊຸມປີ 1954 - 1975, ແຂວງ ກຳແພງນະຄອນຫລວງວຽງຈັນ ໄດ້ກາຍ ເປັນໃຈກາງສະໜາມຮົບໂດຍກົງ ທາງດ້ານການເມືອງ ແລະ ການທະຫານ ໃນການຕໍ່ສູ້ຕ້ານ ກັບລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກກະພັດອາເມລິກາ ຕະຫຼອດໄລຍະແຫ່ງການຕໍ່ສູ້ກູ້ຊາດ ຕ້ານກັບຈັກກະພັດອາເມລິກາ ເປັນເວລາ 21 ປີ, ພະນັກງານ ແລະ ປະຊາຊົນບັນດາເຜົ່າແຂວງ ນະຄອນຫລວງວຽງຈັນ ໄດ້ເສຍສະຫລະຊັບສົມບັດ, ເລືອດເນື້ອ ແລະ ຊີວິດຢ່າງໃຫຍ່ຫລວງ, ເວົ້າສະເພາະ ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ຜູ້ທີ່ເປັນຫລັກແຫລ່ງແກ່ນສານປະ ຕິວັດມີຫລາຍສະຫາຍ ໄດ້ຖືກເຊັ່ນຂ້າທາລຸນ ດ້ວຍຫລາຍຮູບການ ເຊັ່ນ: ຖືກທຸບຕີທໍລະມານ, ຂົ່ມຂືນທຳສຳເນົາ, ແຂວນຄໍ, ກະບີ່ແທງທ້ອງ ແລະ ອື່ນໆ ຢ່າງໂຫດຮ້າຍປ່າເຖື່ອນຫລາຍສະ ຫາຍໄດ້ເສຍຊີວິດ ເພື່ອໄຊຊະນະຂອງການປະຕິວັດ ຢ່າງພິລະອາດຫານ ແລະ ຫລາຍສະຫາຍ ກໍຖືກເສຍອົງຄະ ແລະ ພິການ...

ແຕ່ຍ້ອນນ້ຳໃຈຮັກຊາດ ຄຽດແຄ້ນສັດຕູ ບໍ່ຫວັ່ນໄຫວຄອນ ແຄນຕໍ່ສະພາບການ ສະມາຊິກພັກ ພະນັກງານ ແລະ ປະຊາຊົນ ຊາວນະຄອນຫລວງວຽງຈັນ ໄດ້ຕັດສິນໃຈກ້າວເດີນໄປຕາມການ ຊີ້ນຳ - ນຳພາຂອງພັກ ພ້ອມກັບປະຊາຊົນລາວບັນດາເຜົ່າ ໃນ ຂອບເຂດທົ່ວປະເທດ ລຸກຂຶ້ນຕໍ່ສູ້ຢ່າງອົງອາດກ້າແກ່ນ ສິບຄົນ ລົ້ມລົງ ຮ້ອຍຄົນພັນຄົນ ລຸກຂຶ້ນຕໍ່ສູ້ບຸກຕີດັບສູນສັດຕູຢ່າງບໍ່ຢຸດ ຢັ້ງ ຈົນສາມາດຍາດໄດ້ໄຊຊະນະຢ່າງສົມບູນໃນປີ 1975. ວິລະ ກຳອັນລ້ຳເລີດ, ມູນເຊື້ອອັນດີງາມ ແລະ ຜົນງານອັນໃຫຍ່ຫລວງ ຂອງກຳລັງປະກອບອາວຸດ ແລະ ປະຊາຊົນ ຊາວນະຄອນຫລວງ ວຽງຈັນ ໄດ້ສູງເດັ່ນຂຶ້ນ ກອງປະຊຸມນັກຮົບແຂ່ງຂັນທົ່ວປະເທດ ຄັ້ງທີ 2 ປີ 1979 ພັກ ແລະ ລັດຖະບານ ໄດ້ຕົກລົງມອບນາມມະ ຍົດວິລະຊົນ ໃຫ້ແກ່ແຂວງ ວຽງຈັນ ຕາເວັນອອກ (ນະຄອນຫຼວງ ວຽງຈັນ ປັດຈຸບັນ), ເມືອງ ຍອດງື່ມ, 6 ຕາແສງ, 7 ບ້ານ ແລະ ພະນັກງານ 17 ສະຫາຍ ຢ່າງສົມກຽດ.



ສະຫາຍ ສີທອງ
ວິລະຊົນແຫ່ງຊາດ



ທ່ານ ເພຍຫລວງ
ວິລະຊົນແຫ່ງຊາດ

ໃນບັ້ນສະຫລຸບຜົນງານ 30 ປີ ແຫ່ງການປະຕິວັດຊາດ ປະຊາທິປະໄຕ ພັກ ແລະ ລັດຖະບານ ໄດ້ປະດັບຫລຽນໄຊອິດ ສະຫລະ, ຫລຽນໄຊພິລະອາດຫານ ແລະ ກາຕ້ານຝຣັ່ງ 773 ໜ່ວຍ, ຕ້ານອາເມລິກາ1.380 ໜ່ວຍ, ໃບຍ້ອງຍໍລັດຖະບານ 1.828 ໃບ, ໃບປະເທດຊາດຈາລຶກບຸນຄຸນ 1.140 ໃບ ໃຫ້ແກ່ບັນ ດາກົມກອງ, ເມືອງ, ຕາແສງ, ບ້ານ ແລະ ບຸກຄົນທີ່ມີຄຸນງາມ ຄວາມດີຕໍ່ປະເທດຊາດ ຢ່າງສົມກຽດ.

ຜ່ານຂະບວນການຕໍ່ສູ້ ຍືດເຍື້ອຍາວນານ ເດັດຂາດມີໄຊ ພາຍໃຕ້ການນຳພາຂອງພັກ, ປະຊາຊົນຊາວນະຄອນຫລວງວຽງຈັນ ໄດ້ພ້ອມກັບປະຊາຊົນລາວບັນດາເຜົ່າໃນທົ່ວປະເທດໄດ້ ຕີເອົາຊະນະລຶດທີ່ລ້າເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາ ແລະ ລູກມືຂາຍຊາດ ສຳ ເລັດການປະຕິວັດຊາດ ປະຊາທິປະໄຕ ຢ່າງສົມບູນ ສະຖາປານາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍນັ້ນ, ໄດ້ເປັນບາດລ້ຽວໃໝ່ທີ່ສຳຄັນ ເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດ ໄຊຊະນະ ດັ່ງກ່າວ ມີຄວາມໝາຍປະຫວັດສາດ ແລະ ຍຸກສະໄໝ, ເປັນການຢຸດຕິລັດທິລ່າເມືອງຂຶ້ນແບບໃໝ່ ທີ່ຄອບຄອງປະຊາຊົນວຽງຈັນ ກໍຄືທົ່ວ ປະເທດ ມາເປັນເວລາ 21 ປີ. ລະບອບ ລາຊາທິປະໄຕ ພົ້ນສະໄໝທີ່ກີດໜ່ວງຄວາມຈະເລີນ

ກ້າວໜ້າຂອງຊາດລາວ ມາຫລາຍສັດຕະວັດແລ້ວນັ້ນ ກໍໄດ້ຍຸດຕິ ລົງ. ປະຊາຊົນຊາວ ນະຄອນຫລວງວຽງຈັນ ພ້ອມກັບປະຊາຊົນ ລາວບັນດາເຜົ່າ ໄດ້ເປັນເຈົ້າປະເທດຊາດ ແລະ ເປັນເຈົ້າຂອງສັງ ຄົມຢ່າງແທ້ຈິງ. ເຫດການດັ່ງກ່າວ ໄດ້ໄຂສັງການໃໝ່, ສັງການ ປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນຕາມທິດສັງ ຄົມນິຍົມ ປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະ ກິດປະຕິວັດ ໃນທົ່ວປະເທດ, ໃນພາລະກິດຕໍ່ສູ້ ເພື່ອສັນຕິພາບ ເອກະລາດ ແຫ່ງຊາດ ປະຊາທິປະໄຕ ແລະ ກ້າວໜ້າທາງສັງຄົມ ຂອງປະຊາ ຊົນໃນພາກພື້ນ ແລະ ໃນໂລກ.



ປ້າຄຳປານ ວິລະຊົນແຫ່ງ ຊາດຈາກພາກສ່ວນຮາກ ຖານຊັ້ນບ້ານ

ໄຊຊະນະອັນຍິ່ງໃຫຍ່ ດັ່ງກ່າວ ແມ່ນໄດ້ມາຈາກຫລາຍ ສາຍເຫດ ແຕ່ສາຍເຫດຕົ້ນຕໍນັ້ນແມ່ນ:

1. ກ່ອນອື່ນໝົດ: ແມ່ນຍ້ອນນ້ຳໃຈຮັກຊາດອັນແຮງກ້າ, ມານະຈິດເດັດດ່ຽວຕໍ່ສູ້ບໍ່ຍອມຈຳນົນ, ມູນເຊື້ອສາມັກຄີຕໍ່ສູ້ຢ່າງຕໍ່ ເນື່ອງ ຕ້ານການຮຸກຮານຂອງຈັກກະພັດອາເມລິກາ ເພື່ອຄວາມ ເປັນເອກະລາດ ອິດສະຫລະພາບ ຢ່າງບໍ່ຮູ້ອິດຮູ້ເມື່ອຍ. ຍອມເສຍສະຫລະ ແລະ ອຸດທິຊີວິດ-ຊັບສິນ ສ້າງວິລະກຳອັນລ້ຳເລີດ ພ້ອມກັບກອງທັງ ແລະ ປະຊາຊົນລາວບັນດາເຜົ່າ ໃນທົ່ວປະ ເທດ ຕໍ່ສູ້ຍາດເອົາໄຊຊະນະຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ນະຄອນຫລວງ ວຽງຈັນ.

2. ຍ້ອນການນຳພາອັນສະຫລາດສ່ອງໃສຂອງຄະນະພັກ ແຂວງ ນະຄອນຫລວງວຽງຈັນ ກໍຄືການນຳພາຂອງສູນກາງພັກ ທີ່ໄດ້ວາງແນວທາງ, ນະໂຍບາຍ ແລະ ວິທີການປະຕິວັດຢ່າງ ຖືກຕ້ອງປະດິດສ້າງ, ຖືກກັບຈຸດພິເສດສະເພາະຂອງທ້ອງຖິ່ນ ແລະ ທົ່ວປະທດ. ປຸກລະດົມ ແລະ ຈັດຕັ້ງປະຊາຊົນເປັນກ້ອນກຳລັງແຮງ ແລະ ນຳພາປະຊາຊົນ ນະຄອນຫລວງວຽງຈັນ ລຸກ ຮົ້ຂຶ້ນ ພ້ອມກັບປະຊາຊົນທົ່ວປະເທດ ຕໍ່ສູ້ຍຶດເຍື້ອຍາວນານເດັດຂາດມີໄຊ, ຕໍ່ສູ້ແຕ່ຕ່ຳຫາສູງ, ໂຄ່ນລົ້ມສັດຕູເປັນແຕ່ລະພາກສ່ວນ, ຍາດເອົາໄຊຊະນະເທື່ອລະກ້າວ ແລະ ກ້າວຂຶ້ນຍາດເອົາ ໄຊຊະນະຢ່າງສົມບູນ.

3. ໄຊຊະນະອັນຍິ່ງໃຫຍ່ນັ້ນ ເກີດມາຈາກກຳລັງແຮງ ຂອງປະຊາຊົນທຸກຊັ້ນຄົນ ໃນນະ ຄອນຫຼວງວຽງຈັນ ພ້ອມກັບປະຊາຊົນລາວບັນດາເຜົ່າ ໃນເຂດທີ່ໝັ້ນປະຕິວັດ ຢູ່ໃນແນວຫລັງ

ຂອງສັດຕູ ສົມທົບກັບກຳລັງແຮງຂອງປະຊາຊົນ ຢູ່ໃນເຂດປົດປ່ອຍ ເປັນບ່ອນອີງອັນໜັກແໜ້ນ ໃຫ້ແກ່ການດຳເນີນການຕໍ່ສູ້ປົດປ່ອຍ ໃນນະຄອນຫລວງວຽງຈັນ ກໍຄືທົ່ວປະເທດ.

4. ໄຊຊະນະອັນໃຫຍ່ຫລວງ ເປັນປະຫວັດສາດນັ້ນ ແມ່ນໄດ້ມາຍ້ອນກ້ອນກຳລັງຄວາມສາມັກຄີຕໍ່ສູ້ ພາຍໃຕ້ການນຳພາຂອງສູນກາງພັກ, ຄະນະພັກ ນະຄອນຫລວງວຽງຈັນ, ຍ້ອນຄວາມສຳພັນຮ່ວມຮົບ ລະຫວ່າງ ສາມຊາດ ລາວ - ຫວຽດນາມ ກຳປູເຈຍ ອ້າຍນ້ອງ ໂດຍສະເພາະ ແມ່ນຍ້ອນຄວາມສາມັກຄີ ຮ່ວມສຳພັນສູ້ຮົບແບບພິເສດລະຫວ່າງ ລາວ - ຫວຽດນາມ, ທີ່ໄດ້ຊ່ວຍເຫລືອໄລ່ກັນ ສູ້ຮົບໃນຂຸມຄອງດຽວກັນ ພ້ອມກັນຕໍ່ສູ້ຕ້ານສັດຕູໂຕດຽວກັນ ຍາດເອົາໄຊຊະນະ ພ້ອມກັນກ້າວຂຶ້ນສັງຄົມນິຍົມ ແລະ ຍ້ອນການສະໜັບສະໜູນ ແລະ ເປັນໃຈຂອງບັນດາປະເທດ ສັງຄົມນິຍົມອ້າຍນ້ອງ ຂະບວນການຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ ປະຊາທິປະໄຕ ຂອງບັນດາປະເທດ ທີ່ກ້າວໜ້າໃນໂລກ.

ຜ່ານການເຄື່ອນໄຫວຕໍ່ສູ້ກູ້ຊາດ ມາເປັນເວລາ 21 ປີ ໄດ້ມີບົດຮຽນ ແລະ ປະສົບການແຫ່ງການຕໍ່ສູ້ມີໄຊ ຂອງການປະຕິວັດປົດປ່ອຍ ນະຄອນຫລວງວຽງຈັນ ໂດຍປະສານສົມທົບແໜ້ນ ກັບຂະບວນການປະຕິວັດ ຢູ່ໃນທົ່ວປະເທດນັ້ນ, ພວກເຮົາສາມາດຖອດຖອນບົດຮຽນອັນລ້ຳຄ່າດັ່ງນີ້:

1. ພວກເຮົາເຮັດການປະຕິວັດ ກອບກູ້ປະເທດຊາດ ຢາກມີໄຊຊະນະ ຄວາມຈຳເປັນພາວະວິໃສ ຈະຕ້ອງຍຶດໝັ້ນ ຄົນທຸງ ຊາດ - ປະຊາທິປະໄຕ ແລະ ສົມທົບແໜ້ນລະຫວ່າງສອງໜ້າທີ່ປະຕິວັດຊາດ ກັບປະຊາທິປະໄຕ ໃນເມື່ອພວກເຮົາປຸກລະດົມ ປະຊາຊົນ ນະຄອນຫລວງວຽງຈັນ ລຸກຂຶ້ນສົມທົບກັບ ປະຊາຊົນ ທົ່ວປະເທດ ປະຕິບັດໜ້າທີ່ຕໍ່ສູ້ກູ້ຊາດ ຂັບໄລ່ພວກຈັກກະພັດອາເມລິກາ ທີ່ເຂົ້າມາແຊກແຊງຮຸກຮານ ພ້ອມກັນນັ້ນ ພວກເຮົາຕ້ອງຕໍ່ສູ້ໂຄ່ນລົ້ມ ພວກປະຕິການຂາຍຊາດ ທີ່ເປັນລູກແຫລ້ງຕີນມື ຂອງຈັກກະພັດອາເມລິກາ ເພື່ອໃຫ້ປະຊາຊົນ ຫລຸດພົ້ນອອກ ຈາກລະບອບສັກດິນາປະຕິການ ແລະ ພວກຫຸ່ນຂາຍຊາດ ເຮັດໃຫ້ປະຊາຊົນ ມີສິດເສລີພາບ ປະຊາທິປະໄຕ ຢ່າງແທ້ຈິງ. ເຊິ່ງເປັນບັນຫາພື້ນຖານຂອງປະຊາຊົນ ຜູ້ອອກແຮງງານທີ່ເປັນກຳ ລັງຕັດສິນຂອງການປະຕິວັດ ດ້ວຍເຫດນັ້ນ, ການປະຕິວັດປົດປ່ອຍຊາດ ຈຶ່ງຕິດພັນກັບການປະຕິວັດປະຊາທິປະໄຕ.

2. ຈະຕ້ອງເອົາໃຈໃສ່ ແລະ ຖືເປັນສຳຄັນຍິ່ງ ການກໍ່ສ້າງກ້ອນກຳລັງພັນທະພາບ ກຳມະກອນຊາວນາ ໃຫ້ແໜ້ນແກ່ນ ຢູ່ພາຍໃຕ້ການນຳພາຂອງພັກ. ຕາມຫລັກມູນຂອງທິດສະດີມາກ - ເລນິນແລ້ວ, ຊົນຊັ້ນກຳມະກອນ ເປັນຊົນຊັ້ນນຳໜ້າແຕ່ສຳລັບ ນະຄອນຫລວງວຽງຈັນ ກໍຄືໃນທົ່ວປະເທດລາວເຮົາແມ່ນ ຊາວກະສິກອນ ກວມເອົາ 80% ຂອງປະຊາກອນໃນທົ່ວປະເທດ.

ດັ່ງນັ້ນ ຢາກເຮັດການປະຕິວັດຊາດ - ປະຊາທິປະໄຕ ສຳເລັດຜົນ ພວກເຮົາຈະຕ້ອງເອົາໃຈໃສ່ ປຸກລະດົມ ແລະ ຈັດຕັ້ງຊັ້ນຄົນກຳມະກອນຢູ່ໃນຕົວເມືອງ ສົມທົບກັບການປຸກລະດົມ ແລະ ຈັດຕັ້ງຊາວນາຢູ່ຊົນນະບົດ ນະຄອນຫລວງວຽງຈັນ ພ້ອມກັບທົ່ວປະເທດ ພ້ອມກັນລຸກ ຂຶ້ນເຮັດການປະຕິວັດ ພາຍໃຕ້ການນຳພາຂອງພັກ ຈຶ່ງຈະສາມາດຢຶດເອົາອຳນາດການປົກຄອງ ມາມືປະຊາຊົນ ຢ່າງແທ້ຈິງໄດ້.

3. ບັນຫາແນວໂຮມແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ແນວໂຮມພາຍໃນແຂວງ ນະຄອນຫລວງວຽງຈັນ ທີ່ເປັນປັດໄຈຕັດສິນໄຊຊະນະຂອງການປະຕິວັດ. ມະຫາຊົນເປັນກຳລັງແຮງຂອງການປະຕິວັດ. ດັ່ງນັ້ນ, ຄະນະພັກ ຍາມໃດກໍໄດ້ເອົາໃຈໃສ່ ປຸກລະດົມເຕົ້າໂຮມມະຫາຊົນ ທຸກຊັ້ນຄົນຢູ່ໃນຕົວເມືອງ ແລະ ຊົນນະບົດ ບົນພື້ນຖານພັນທະພາບ ກຳມະກອນຊາວນາ ພາຍໃຕ້ການນຳພາຂອງພັກ ຢູ່ສະເໝີ ຄວາມສາມັກຄີພາຍໃນຊາດ ເປັນບັນຫາເປັນຕາຍຂອງການປະຕິວັດ. ປະຫວັດສາດຂອງຊາດ ກໍຄືປະຫວັດສາດຂອງ ນະຄອນຫລວງວຽງຈັນ ໄດ້ພິສູດ ແລະ ຢັ້ງຢືນວ່າ: " ເມື່ອໃດປະຊາຊົນວຽງຈັນ ແລະ ປະຊາຊົນລາວທັ້ງຊາດສາມັກຄີກັນຕໍ່ສູ້ປົກປັກຮັກສາ ແລະ ພັດທະນາປະເທດ ເມື່ອນັ້ນ ນະຄອນຫລວງວຽງຈັນ ແລະ ປະເທດຊາດມີຄວາມສະຫງົບ ມີການພັດທະນາຮຸ່ງເຮືອງເຫລື້ອງເຫລື້ອມ ແຕ່ເມື່ອໃດຍາມໃດ ປະຊາຊົນລາວເຮົາ ກໍຄື ປະຊາຊົນ ວຽງຈັນ ມີຄວາມແຕກແຍກກັນເມື່ອນັ້ນ ຍາມນັ້ນ ລາວເຮົາຖືກອ່ອນເພຍ, ຖືກປະລາໄຊເຈັບແສບ, ລະທົມຂົມຂື່ນສູນເສຍເອກະລາດ, ອິດສະຫລະພາບໃຫ້ພວກສັກດິນາ ແລະ ຈັກກະພັດຜູ້ຮຸກຮານ. ນັ້ນແມ່ນບົດຮຽນອັນລ້ຳຄ່າຂອງ ປະຊາຊົນວຽງຈັນ ກໍ່ຄືຂອງປະຊາຊົນທົ່ວປະເທດ ". ດັ່ງນັ້ນ, ການປະຕິວັດຊາດ ປະຊາທິປະໄຕ ຢາກສຳເລັດຜົນຢ່າງສົມບູນ ເພື່ອກ້າວຂຶ້ນສູ່ໄລຍະໃໝ່ ຂອງການປະຕິວັດສັງຄົມນິຍົມ ຢ່າງມີໄຊນັ້ນ, ບັນຫາແນວໂຮມ - ເຕົ້າໂຮມຄວາມສາມັກຄີເປັນເອກະພາບ ພາຍໃນປະຊາຊົນ ນະຄອນຫລວງວຽງຈັນ ກໍຄືປະຊາຊົນໃນທົ່ວປະເທດ ບົນພື້ນຖານພັນທະພາບ ກຳມະກອນ - ຊາວນາ ພາຍໃຕ້ການນຳພາຂອງພັກ ຍິ່ງມີຄວາມຈຳເປັນ ພາວະວິໄສ ເພື່ອໄຊຊະນະຂອງການປະຕິວັດສັງຄົມນິຍົມ.

4. ບົນພື້ນຖານເຊື່ອມຊຶມ ກຳແໜ້ນທັດສະນະກຳລັງຮຸນແຮງປະຕິວັດ. ສົມທົບສອງກຳລັງ ແລະ ສອງຮູບການຕໍ່ສູ້ຄື: ການຕໍ່ສູ້ການເມືອງກັບການຕໍ່ສູ້ດ້ວຍອາວຸດ ຢ່າງແໜ້ນແຟ້ນເພື່ອຕີເອົາຊະນະສັດຕູທຸກໂຕ ສູນກາງພັກ, ຄະນະພັກນະຄອນຫລວງວຽງຈັນ ໄດ້ປຸກລະດົມ ແລະ ຈັດຕັ້ງ ປະຊາຊົນ ທຸກຊັ້ນຄົນຢູ່ຕົວເມືອງ ແລະ ຊົນນະບົດດຳເນີນການຕໍ່ສູ້ ຢ່າງເດັດດ່ຽວໝຽວແໜ້ນ, ໂດຍປະກອບສ່ວນສົມທົບຢ່າງມີຊີວິດຊີວາ ແລະ ປະດິດສ້າງ ລະຫວ່າງການຕໍ່ສູ້ການເມືອງ, ກົດໝາຍກັບການຕໍ່ສູ້ ດ້ວຍກຳລັງປະກອບອາວຸດ ເພື່ອປົກປັກຮັກສາ ແລະ ພັດທະນາ

ເຂດທີ່ໝັ້ນປະຕິວັດ ສົມທົບກັບການຕໍ່ສູ້ຂອງປະຊາຊົນ ຢູ່ໃນທົ່ວປະເທດ ເປັນແນວໜ້າຂອງ ເຂດປົດປ່ອຍກຽມພ້ອມໃນທຸກດ້ານ ເພື່ອລຸກຮື້ຂຶ້ນຍຶດອຳນາດການປົກຄອງ.

ຍາມໃດກໍຖືວ່າ ບັນຫາພື້ນຖານຂອງການປະຕິວັດ ແມ່ນບັນຫາອຳນາດການປົກຄອງ ເພາະວ່າ ພວກຈັກກະພັດລ່າເມືອງຂຶ້ນ ແລະ ຊົນຊັ້ນປົກຄອງ ບໍ່ຍອມປະລະສິດອຳນາດຂອງ ເຂົາຢ່າງງ່າຍດາຍ. ດັ່ງນັ້ນ, ມີແຕ່ຍຶດໝັ້ນ ແລະ ນຳໃຊ້ກຳລັງຮຸນແຮງປະຕິວັດຂອງມະຫາຊົນ ເທົ່ານັ້ນ ຈຶ່ງສາມາດຍຶດອຳນາດການປົກຄອງມາມືປະຊາຊົນຢ່າງແທ້ຈິງໄດ້. ຜ່ານພຶດຕິກຳຕົວ ຈິງ, ພວກເຮົາສາມາດສະຫລຸບໄດ້ວ່າ " ກຳລັງຮຸນແຮງປະຕິວັດ ປະກອບດ້ວຍກຳລັງການເມືອງ ຂອງມະຫາຊົນທຸກຊັ້ນຄົນ ແລະ ກຳລັງປະກອບອາວຸດຂອງປະຊາຊົນ ດຳເນີນການຕໍ່ສູ້ດ້ວຍ ຫລາຍຮູບຫລາຍສີ ເພື່ອຕີເອົາຊະນະສັດຕູທຸກໂຕ, ຍຶດອຳນາດການປົກຄອງ ມາມື ປະຊາຊົນ ທົ່ວແຂວງ ແລະ ທົ່ວປະເທດຢ່າງສົມບູນ.

5. ກຳແໜ້ນການໝູນໃຊ້ຍຸດທະສາດ ຍຸດໂທບາຍປະນິປະນອມກັບຝ່າຍກົງກັນຂ້າມ ຢ່າງມີຫລັກການ. ຮູ້ສົມທົບຢ່າງແໜ້ນແຟ້ນ ລະຫວ່າງການຕໍ່ສູ້ດ້ວຍກຳລັງອາວຸດກັບການຕໍ່ສູ້ ທາງການເມືອງ ເຊິ່ງເປັນວິທີການຕໍ່ສູ້ຂອງການປະຕິວັດຊາດ ປະຊາທິປະໄຕ ການຕໍ່ສູ້ ດັ່ງກ່າວ ບໍ່ແມ່ນໄປຕາມເສັ້ນທາງຊື່ກົງ, ບາງຄັ້ງຄາວກໍເອົາການຕໍ່ສູ້ດ້ວຍອາວຸດເປັນຕົ້ນຕໍ. ບາງຄັ້ງຄາວ ກໍເອົາການຕໍ່ສູ້ການເມືອງ ແລະ ກົດໝາຍ ເປັນຕົ້ນຕໍ. ບາງຄັ້ງຄາວກໍເອົາການຕໍ່ສູ້ ດ້ວຍກຳລັງ ອາວຸດສົມຄູ່ກັບການຕໍ່ສູ້ການເມືອງ. ບາງຄັ້ງຄາວ ກໍຍອມຮັບເອົາການເຈລະຈາການເມືອງປະນິ ປະນອມ ກັບຝ່າຍກົງກັນຂ້າມຢ່າງມີຫລັກການ ເພື່ອຈຳກັດສິ່ງກີດຂວາງ ພາການປະຕິວັດກ້າວ ຂຶ້ນ, ເຮັດໃຫ້ການຊັ່ງຊາກຳລັງ ລະຫວ່າງເຮົາກັບສັດຕູມີການປ່ຽນແປງທີ່ເປັນຜົນດີ ໃຫ້ການປະ ຕິວັດເທື່ອລະກ້າວ, ໃນທີ່ສຸດກໍຍາດໄດ້ທ່າດີຢ່າງເດັດຂາດ ສົມທົບກັບທົ່ວປະເທດ ຍາດເອົາໄຊ ຊະນະຢ່າງສົມບູນ.

ໃນພຶດຕິກຳຕົວຈິງ ໃນຍ່ານທາງຕໍ່ສູ້ ເພື່ອຕີເອົາຊະນະຈັກກະພັດອາເມລິກາ ແລະ ລູກມື ປະຕິການໃນ 21 ປີ ຜ່ານມາ ໄດ້ຢືນຢັນໃຫ້ພວກເຮົາເຫັນຢ່າງຈະແຈ້ງ ວ່າ: ການເຈລະຈາເຊັນ ສັນຍາ ເຂົ້າຮ່ວມປອງດອງຊາດ ທັງ 3 ຄັ້ງ, ແຕ່ລະຄັ້ງກໍເຮັດໃຫ້ກຳລັງປະຕິວັດ ເຕີບໃຫຍ່ຂະ ຫຍາຍຕົວຂຶ້ນ.ຈາກຕັ້ງຢູ່ໃນທ່າຮັບ ກ້າວຂຶ້ນຢູ່ໃນທ່າເປັນເຈົ້າການ ບຸກຕີດັບສູນສັດຕູ ຍຶດອຳ ນາດ ເປັນແຕ່ລະພາກສ່ວນ, ຍາດເອົາໄຊຊະນະເທື່ອລະກ້າວ, ກ້າວຂຶ້ນຍາດເອົາໄຊຊະນະ ຢ່າງສົມບູນ.

6. ຮູ້ສ້າງ ແລະ ກຳເອົາກາລະໂອກາດຮ້ອຍປີພັນປີ ມີເທື່ອໜຶ່ງເສີມຂະຫຍາຍກຳລັງແຮງ ສັງລວມ ຂອງການປະຕິວັດ ກັບກຳລັງແຮງຂອງຍຸກສະໄໝ. ນຳໃຊ້ທ້າງສາມບາດຄ້ອນຍຸດທະ

ສາດ (ກຳລັງແຮງຂອງມະຫາຊົນ, ກຳລັງທະຫານຝ່າຍວຽງຈັນ ແຍກຕົວອອກມາຮ່ວມມືກັບປະຊາຊົນ ແລະ ກຳລັງປະກອບອາວຸດ ປະຕິວັດບຸກຕີສັດຕູ ທັບມ້າງກົງຈັກການປົກຄອງປະຕິການພ້ອມກັບປະຊາຊົນ ທົ່ວປະເທດ ຍາດເອົາໄຊຊະນະຢ່າງສົມບູນ.

ຜ່ານຂະບວນການຕໍ່ສູ້ການເມືອງ, ການທະຫານ ເພື່ອຍາດເອົາໄຊຊະນະກັບສັດຕູ ເປັນເວລາ 21 ປີ ພາໄປເຖິງການສ້າງຕັ້ງ ລັດຖະບານປະສົມ ຊື່ວຄາວແຫ່ງຊາດ ທັ້ງສາມຄັ້ງຢູ່ນະຄອນຫລວງວຽງຈັນ ນັ້ນ ໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກອັນແນ່ນອນ ຈາກພາຍໃນ ແລະ ພາຍນອກປະເທດ ປະຊາຊົນ ນະຄອນຫລວງວຽງຈັນ ພາຍໃຕ້ການນຳພາຂອງພັກ ໄດ້ຮູ້ ກຳເອົາເງື່ອນໄຂເອື້ອອຳນວຍ ດັ່ງກ່າວ ໂດຍທັນທີ ເພື່ອປັບປຸງ ແລະ ເສີມຂະຫຍາຍກຳລັງແຮງສັງລວມພາຍໃນ ສົມທົບກັບກຳລັງແຮງສັງລວມຢູ່ໃນທົ່ວປະເທດ ຊຸກຍູ້ການປະຕິວັດກ້າວຂຶ້ນ ຍາດເອົາໄຊຊະນະອັນຍິ່ງໃຫຍ່ ແລະ ຫລຸດຜ່ອນການສູນເສຍເລືອດເນື້ອຂອງປະຊາຊົນ ປະຕິບັດທິດນຳຂອງພັກ ທີ່ວ່າ: “ ບົວບໍ່ຊ້ຳກ້ຳບໍ່ຊຸ່ມ ແຕ່ຈັບປາໃນໜອງໄດ້ທັງໝົດ ” ດ້ວຍການເສີມຂະຫຍາຍກຳລັງແຮງ ອັດຕະວິໄສຂອງຕົນ ບວກກັບກຳລັງແຮງໃນທົ່ວປະເທດ ແລະ ກຳລັງແຮງສັງລວມຂອງຍຸກສະໄໝ ລຸກຮື້ຂຶ້ນພາບດ້ວຍບຸກຕີສັດຕູ ໂຄ່ນລົ້ມ ລະບອບການປົກຄອງຂອງສັດຕູ ລົ້ງເປັນແຕ່ລະພາກສ່ວນ ຈາກຊົນນະບົດເຂົ້າສູ່ຕົວເມືອງ. ສ້າງ ແລະ ຈັບເອົາໂອກາດທັ້ງພາຍໃນ ແລະ ຕ່າງປະເທດ ຍາດເອົາໄຊຊະນະເທື່ອລະກ້າວ, ກ້າວຂຶ້ນພ້ອມກັບປະຊາຊົນ ໃນທົ່ວປະເທດ ຍາດເອົາໄຊຊະນະສົມບູນ.

7. ຮູ້ສົມທົບນ້ຳໃຈຮັກຊາດ ຄຽດແຄ້ນສັດຕູຂອງປະຊາຊົນ ຢູ່ພາຍໃນບວກກັບນ້ຳໃຈສາກົນ ອັນແທ້ຈິງຢ່າງຖືກຕ້ອງ. ໄປຄຽງຄູ່ກັບຄວາມສາມັກຄີສູ້ຮົບ ແບບພິເສດກັບປະຊາຊົນຫວຽດນາມ - ກຳປູເຈຍ ອ້າຍນ້ອງ ບວກກັບການຍາດແຍ່ງເອົາການສະໜັບສະໜູນ, ການຊ່ວຍເຫລືອຂອງໂຊວຽດ, ສາທາລະນະລັດ ປະຊາຊົນ ຈີນ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ກາຍເປັນກຳລັງແຮງສັງລວມ ຂອງຍຸກສະໄໝອັນມະຫາສານ ຕີເອົາໄຊຊະນະສັດຕູສຳເລັດ ການປະຕິວັດຊາດ ປະຊາທິປະໄຕ ໃນທົ່ວປະເທດຢ່າງສົມບູນ.

ພາກທີ ຫ້າ

ນະຄອນຫລວງວຽງຈັນ
ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ
(ປີ 1975 - 2010)

I. ການປົກປັກຮັກສາລະບອບໃໝ່ ແລະ ການດັດສ້າງ - ກໍ່ສ້າງ ສັງຄົມນິຍົມ ຢູ່ ນະຄອນຫຼວງວຽງຈັນ ແຕ່ປີ 1976 – 1986.

ກ. ສະພາບແວດລ້ອມ ຢູ່ອິນດູຈີນ ຫຼັງປີ 1975.

ຈັກກະພັດອາເມລິກາ ແລະ ລູກມື ເຖິງວ່າປະລາໄຊຢ່າງ ເຈັບແສບ ໃນສົງຄາມ ແຊກແຊງ ຮຸກຮານ. ແຕ່ພວກເຂົາ ກໍ່ຍັງລ້ຽງຄວາມຫວັງ ຈະຟື້ນຊີບ ກັບຄືນມາຄອບຄອງ ອີກຄັ້ງໃໝ່. ດັ່ງ ນັ້ນ, ພວກເຂົາຈຶ່ງໄດ້ມີແຜນການ ແລະ ທັງດຳເນີນການເຄື່ອນໄຫວມ້າງເພ, ທຳລາຍດ້ວຍຫຼາຍ ຮູບການ, ວິທີການນັບທັງດ້ານການເມືອງ, ການທະຫານ, ເສດຖະກິດ ແລະ ການຕ່າງປະເທດ. ແນໃສ່ເພື່ອໂຄ່ນລົ້ມລະບອບໃໝ່ “ ບີບໃຫ້ຕາຍຄາອູ່ ” ແຕ່ຍັງອ່ອນນ້ອຍ.

ບັນດາປະເທດ ທີ່ເດີນຕາມເສັ້ນທາງສັງຄົມນິຍົມ ຈຳນວນໜຶ່ງ ຍັງສືບຕໍ່ຜິດຂ້ອງ ຕ້ອງຖຽງ ກັນ ເລື່ອງບັນຫາ ຊາຍແດນ ຈົນເກີດມີການປະທະກັນ ດ້ວຍກຳລັງອາວຸດ ແລະ ອື່ນໆ...

ສະເພາະປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫາກໍ່ສະຖາປານາ ຂຶ້ນ ໃໝ່, ພື້ນຖານເສດຖະກິດ - ສັງຄົມ ຢູ່ທົ່ວປະເທດ ທີ່ລະບອບເກົ່າປະໄວ້ ແມ່ນຢູ່ໃນສະພາບຊຸດ ໂຊມ ຈະຕ້ອງໄດ້ຮັບການຟື້ນຟູ ດັດສ້າງ ແລະ ກໍ່ສ້າງຄືນໃໝ່... ແລະ ຈະຕ້ອງມີເວລາ ຮຳບາດ ແຜ ສົງຄາມ ໄປອີກໄລຍະໜຶ່ງ ຈຶ່ງຈະຟື້ນຟູ ແລະ ພັດທະນາ ຕໍ່ໄປໄດ້.

ຂ. ການປັບປຸງ - ກໍ່ສ້າງລັດ ປະຊາທິປະໄຕ ປະຊາຊົນ, ຮຳບາດແຜ ສົງຄາມ ແລະ ຟື້ນຟູ ເສດຖະກິດ ແຕ່ປີ 1976 -1981 ຢູ່ນະຄອນຫລວງວຽງຈັນ.

ເມື່ອປະເທດຊາດ ໄດ້ຮັບການປົດປ່ອຍ ຢ່າງສົມບູນ ແລະ ສະຖາປານາ ເປັນ ສປປ ລາວ ໃນວັນທີ 2 ທັນວາ ປີ1975 ແລ້ວ, ປະເທດລາວ ກໍ່ໄດ້ກາຍເປັນປ້ອມດ້ານໜ້າ ຂອງລະບົບສັງ ຄົມນິຍົມ ຢູ່ໃນພາກພື້ນ ອິນດູຈີນ. ໃນນີ້, ນະຄອນຫລວງວຽງຈັນ ຊຳພັດໄດ້ກາຍເປັນປ້ອມດ້ານ ໜ້າທີ່ສຳຄັນກວ່າໝູ່ ຂອງປະເທດລາວ ເພາະມີເສັ້ນ ຊາຍແດນ ຕິດຈອດກັບປະເທດໄທ ທີ່ເປັນ ປະເທດທຶນນິຍົມ ຍາວເຖິງ 200 ກວ່າກິໂລແມັດ. ບັນຫາຄວາມຫຍຸ້ງຍາກລຳບາກ ກໍ່ຄືບັນດາ ສິ່ງທ້າທາຍຕ່າງໆ ນັບທັງນອກຕົວ ແລະ ໃນຕົວທີ່ຄະນະພັກ, ອຳນາດການປົກຄອງ ແລະ ຊາວ ນະຄອນຫຼວງວຽງຈັນ ຈະຕ້ອງໄດ້ປະເຊີນນັ້ນ, ໜຶ່ງ: ບົດຮຽນ, ປະສົບປະການ, ຄວາມສາມາດ ຄຸ້ມຄອງລັດ, ຄຸ້ມຄອງສັງຄົມແບບສັງຄົມນິຍົມຍັງຈຳກັດ; ສອງ: ພື້ນຖານໂຄງລ່າງເສດຖະກິດ, ວັດຖຸ, ເຕັກນິກ ຍັງມີຫລາຍດ້ານຂາດເຂີນ; ສາມ: ບັນຫາສຳຄັນກວ່າໝູ່ແມ່ນ ພວກຈັກກະພັດ ແລະ ອິດທິກຳລັງປໍລະປັກ ຍັງບໍ່ປະລະກິນອຸບາຍມ້າງເພ, ທຳລາຍ ແລະ ຫວັງໂຄ່ນລົ້ມກືນກິນ ລະບອບໃໝ່ທີ່ຍັງອ່ອນນ້ອຍ, ພວກເຂົາໄດ້ເກາະຫ້ອຍຢູ່ໃນຕົວເມືອງ, ພື້ນຖານປະຊາຊົນ ຢູ່ຊົນ ນະບົດ ໂດຍມີບ່ອນອີງຢູ່ປະເທດໄທ. ດ້ວຍເຫດນັ້ນ, ຫລັງຈາກການໂຄ່ນລົ້ມລະບອບເກົ່າ ສ້າງ



ທ່ານ ໝື່ນ ສີມວິຈິດ ກຳມະການສູນກາງພັກ, ທັງເປັນປະທານປົກຄອງນະຄອນຫຼວງວຽງຈັນ. ປີ 1975

ຕັ້ງລະບອບໃໝ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນແລ້ວ. ບັນຫາກົກທີ່ລັດຖະບານ ກໍ່ຄືອຳນາດການປົກຄອງ ປະຕິວັດຢູ່ ນະຄອນຫລວງວຽງຈັນ ຕ້ອງປະຕິບັດຮີບດ່ວນກ່ອນໝູ່ ແມ່ນການປົກປັກຮັກສາໝາກຜົນຂອງການປະຕິວັດ, ປັບປຸງອຳນາດລັດ, ຮຳບາດແຜສົງຄາມ ແລະ ຟື້ນຟູເສດຖະກິດ - ສັງຄົມ ໃຫ້ເຂົ້າສູ່ຄວາມສະຫງົບປົກກະຕິໂດຍໄວ. ດັ່ງນັ້ນ, ມາເຖິງປີ 1976 ຄະນະພັກ, ຄະນະປົກຄອງໃໝ່ປະຕິວັດຢູ່ນະຄອນຫລວງວຽງຈັນ ຈຶ່ງໄດ້ສຸມໃສ່ປັບປຸງລະບົບການເມືອງ ກໍ່ຄື ອຳນາດລັດ ເລີ່ມແຕ່ຂັ້ນແຂວງລົງຮອດຂັ້ນບ້ານ, ໂດຍຖືເອົາການປັບປຸງການຈັດຕັ້ງພັກ ແລະ ອຳນາດການປົກຄອງແຕ່ລະຂັ້ນໃຫ້ມີຄວາມສາມາດນຳພາ ແລະ ຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ຕ້ານການທຳລາຍມ້າງເພຂອງສັດຕູ ປົກປັກຮັກສາໝາກຜົນຂອງການປະຕິວັດ, ຊຸກຍູ້ການຜະລິດສະບຽງອາຫານ, ຮຳບາດແຜສົງຄາມ ນຳເອົາຊີວິດການເປັນຢູ່ໃນທຸກດ້ານ ເຂົ້າສູ່ຄວາມສະຫງົບ ເປັນປົກກະຕິ. ຢູ່ນະຄອນຫລວງວຽງຈັນ, ກົມການເມືອງສູນກາງພັກ ໄດ້ແຕ່ງຕັ້ງ ແລະ ມອບໝາຍໜ້າທີ່ໃຫ້ **ທ່ານ ສີສະຫວາດ ແກ້ວບຸນພັນ** ກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ເປັນຫົວໜ້າຄະນະຊີ້ນຳ ໃນການຈັດຕັ້ງກໍ່ສ້າງ ນະຄອນຫລວງວຽງຈັນ, ຊຶ່ງປະກອບມີບັນດາ **ທ່ານ ສາລີ ວົງຄຳຊາວ** ກຳມະການສູນກາງພັກ, ຄະນະເລຂາທິການສູນກາງພັກ ເປັນຮອງ, **ທ່ານ ໝື່ນ ສີມວິຈິດ** ກຳມະການສູນກາງພັກ, ທັງເປັນປະທານປົກຄອງ ນະຄອນຫລວງວຽງຈັນ ເປັນກຳມະການ ແລະ **ທ່ານ ທິດມ່ວນ ສາວຈັນ ທະລາ** ກຳມະການສູນກາງພັກ ເປັນກຳມະການ.

ບັນດາໜ້າທີ່ວຽກງານ ທີ່ຄະນະຮັບຜິດຊອບ ຊີ້ນຳ ລົງມືປະຕິບັດ ມີຄື: ການປັບປຸງການຈັດຕັ້ງພັກ, ອຳນາດການປົກຄອງ ແຕ່ຂັ້ນແຂວງລົງເຖິງຂັ້ນບ້ານ, ການບຳລຸງສ້າງກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ເພື່ອສາມາດຕ້ານເລ່ກົນທຳລາຍມ້າງເພ ຂອງສັດຕູຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ດ້ານສັງຄົມ ຮັບປະກັນໃຫ້ປະຊາຊົນ ໄດ້ດຳລົງຊີວິດຢູ່ໃນຄວາມສະຫງົບສຸກ, ເລີກຮື້ພວກນັກສົບສອດແນມ ທີ່ເຊື່ອງຊ້ອນໄວ້ຕາມຄຸ້ມບ້ານ, ຕົວເມືອງ, ໂຮງຈັກ ໂຮງງານ, ກວາດລ້າງພວກປະຕິການຢູ່ເຂດລ້ອງແມດ, ເມືອງ ເຟືອງ, ກາສີ, ວັງວຽງ ແກ້ໄຂຄວາມບໍ່ສະຫງົບ ທີ່ສັດຕູກໍ່ຂຶ້ນຕາມເສັ້ນທາງ ເລກທີ 13 ເໜືອ ແລະ ໃຕ້. ຟື້ນເດັ່ນແມ່ນການກອບກູ້ເອົາດອນຊີ່ງຊູ້ ເມືອງ ຈັນທະບູລີ, ດອນສັງຄີ, ດອນກຳ, ເມືອງ ຫາດຊາຍຟອງ ໃນປີ 1977 ເຮັດໃຫ້ພວກສັດຕູທີ່ເຂົ້າບຸກຢຶດ ແລະ ພວກປະຕິການຂວາຈັດໄທ ໜູນຫລັງ

ຖືກປະລາໄຊໜັກສົມຄວນ. ຕໍ່ມາ ປີ 1979, ກຳລັງປະກອບອາວຸດ ນະຄອນຫລວງວຽງຈັນ ກໍ່ໄດ້ໂຈມຕີສັດຕູທີ່ເຂົ້າມາລີ້ຊ້ອນຢູ່ ຫ້ວຍພັກໄໝ ສັນພູພະນັງ ເມືອງ ນາຊາຍທອງ ສາມາດປົດເຂ່ຍສັດຕູອອກຈາກວົງສູ້ຮົບ ແລະ ຢຶດອາວຸດໄດ້ຈຳນວນໜຶ່ງ.

ດ້ານການ ຟື້ນຟູເສດຖະກິດ - ສັງຄົມ ແມ່ນໄດ້ສຸມໃສ່ຊີ້ນຳກໍ່ສ້າງພື້ນຖານ ແລະ ຊຸກຍູ້ການຜະລິດດ້ານສະບຽງອາຫານ, ແກ້ໄຂຜົນຮ້າຍຂອງສົງຄາມ ແລະ ລະບອບເກົ່າປະໄວ້, ສູ້ຊົນປະຕິບັດນະໂຍບາຍສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງຕາມທິດສັງຄົມນິຍົມ, ປຸກລະດົມປະຊາຊົນ ເຂົ້າຮ່ວມໃນແນວຮົບການຜະລິດກະສິກຳຟື້ນຟູນາເຮົ້ອ, ຊ່າວນາໃໝ່, ຕ້ານໄພທຳມະຊາດ ສ້າງຊົນລະປະທານເຮັດກະເສດສຸມ, ເຮັດນາແຊງ ຫັນເປັນສະຫະກອນກະເສດລວມໝູ່, ສະຫະກອນຄ້າຂາຍ ໂດຍສະເພາະ ຫລັງຈາກສຳເລັດປັ້ນກວາດລ້າງ ພວກປະຕິການຢູ່ລຽບຕາມຊາຍແດນສະຫງົບລົງ. ຄະນະພັກ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ປຸກລະດົມ ປະຊາຊົນ ຊັ້ນຄົນຕ່າງໆ ນັບທັງຊາວໜຸ່ມ, ຍິງໜຸ່ມ, ອົງການຈັດຕັ້ງມະຫາຊົນ, ທະຫານ, ຕຳຫລວດ ນັບເປັນໝື່ນໆຄົນ ແຂ່ງຂັນກັນກໍ່ສ້າງພື້ນຖານເສດຖະກິດ ຜະລິດກະສິກຳສ້າງຊົນລະປະທານອ່າງເກັບນ້ຳຫຸມ, ນ້ຳຊອງ ແລະ ແຫ່ງອື່ນໆ ສາມາດນຳເອົານ້ຳເຂົ້າຮັບໃຊ້ເນື້ອທີ່ທຳການຜະລິດກະສິກຳ ໄດ້ຫລາຍພັນເຮັກຕາ ໄດ້ປັບປຸງ ແລະ ຟື້ນຟູຄືນບັນດາໂຮງຈັກໂຮງງານທີ່ລະບອບເກົ່າປະໄວ້ ເຊັ່ນ: ໂຮງງານ ຕັດຫຍິບ, ໂຮງງານ ຢາສູບ, ໂຮງງານ ຜະລິດເບຍ, ນ້ຳຫວານ, ໂຮງງານ ປຸງແຕ່ງໄມ້... ຊຶ່ງໃນຈຳນວນດັ່ງກ່າວນີ້ ເບື້ອງຕົ້ນລັດຖະບານ ໄດ້ແບ່ງປັນໃຫ້ ນະຄອນຫລວງວຽງຈັນ ຮັບຜິດຊອບ ຕໍ່ມາໄດ້ໂອນເປັນຂອງລັດຈຳນວນຫລາຍ. ໄປພ້ອມກັບການກໍ່ສ້າງພື້ນຖານເສດຖະກິດ ໄດ້ເອົາໃຈໃສ່ຊຳລະສະສາງໄພພິບັດດ້ານສັງຄົມ: ການກຶກໜັງສື, ຂະຫຍາຍວັດທະນະທຳ, ຍົກລະດັບການສຶກສາໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນ. ມາຮອດປີ 1978, ທົ່ວນະຄອນຫລວງວຽງຈັນ ປະກາດລົບລ້າງຄວາມກຶກໜັງສື ໄດ້ 100 %; ດ້ານສາທາລະນະສຸກ ໄດ້ປັບປຸງບັນດາໂຮງໝໍ ກ່ຽວກັບກິນໄກ ປິ່ນປົວພະຍາດ ແກ້ໄຂການຂາດເຂີນດ້ານຢຸກຢາ, ແກ້ໄຂການເສື່ອມໂຊມດ້ານວັດທະນະທຳ - ສັງຄົມ ທີ່ລະບອບເກົ່າປະໄວ້. ການສູບຝິ່ນກິນຊາ, ແມ່ຈ້າງນາງເລງການຫລິ້ນເບ້ຍເຈ້ຍໄພ້, ຄົນຈໍລະຈັດອັນຕະພານ ໂດຍສົ່ງເຂົ້າສູນດັດສ້າງຢູ່ດອນທ້າວ, ດອນນາງ ຈົນກາຍເປັນຄົນດີກັບຄືນມາຫາຄອບຄົວ ແລະ ເຂົ້າສູ່ສັງຄົມຕາມປົກກະຕິ.

ມາເຖິງ ວັນທີ 5 ເມສາ ປີ 1979, ຢູ່ນະຄອນຫລວງວຽງຈັນ, ພາຍຫລັງ ໄດ້ຮັບການປັບປຸງບູລະນະ ດ້ານການຈັດຕັ້ງແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນໄດ້ມີຄວາມສະຫງົບ ໂດຍພື້ນຖານແລ້ວ. ພັກ - ລັດຖະບານ ໄດ້ເອົາໃຈໃສ່ກວດກາຄືນຜົນງານຂອງບັນດາ ພະນັກງານ, ທະຫານ,

ຕຳຫລວດ ແລະ ປະຊາຊົນ ບັນດາເຜົ່າ ທີ່ໄດ້ປະກອບສ່ວນເຂົ້າໃນການຕໍ່ສູ້ກູ້ຊາດ ແລະ ຕໍ່ສູ້ປົກປັກຮັກສາປະເທດຊາດ ຊຶ່ງໄດ້ເປີດກອງປະຊຸມໃຫຍ່ວິລະຊົນ ແລະ ນັກຮົບແຂ່ງຂັນແຫ່ງຊາດ ຄັ້ງທີ III ຂຶ້ນຢູ່ທີ່ ນະຄອນຫລວງວຽງຈັນ (ຂໍ້ຕົກລົງເລກທີ 17, ລົງວັນທີ 5/4/1979). ກອງປະຊຸມນີ້, ໄດ້ກວດຄືນຜົນງານ, ການຍ້ອງຍໍລວມໝູ່ ແລະ ບຸກຄົນໃນໄລຍະດຳເນີນການຕໍ່ສູ້ກູ້ຊາດ 30 ປີ (ປີ 1945 - 1975). ຢູ່ໃນນັ້ນ ບັນດາພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນ ຊາວນະຄອນຫລວງວຽງຈັນ ນັບຫລາຍຮ້ອຍຄົນ ກໍ່ໄດ້ຮັບການຍ້ອງຍໍສັນລະເສີນຈາກພັກ - ລັດ ກໍ່ຄືປະເທດຊາດ. ຫລາຍສະຫາຍພະນັກງານ, ນັກຮົບ, ປະຊາຊົນ ປະເທດຊາດ ໄດ້ຈາລຶກບຸນ ຄຸນມີຫລາຍບຸກຄົນ ແລະ ລວມໝູ່ໄດ້ຮັບນາມມະຍົດເປັນວິລະຊົນ ແລະ ນັກຮົບແຂ່ງຂັນຢ່າງ ສົມກຽດ ຄື:

ນາມມະຍົດ ວິລະຊົນ ລວມໝູ່ ມີ:

1. ກອງພັນທີ 1 ເຂດວຽງຈັນ.
2. ເມືອງ ຍອດງົ່ມເກົ່າ (ເມືອງ ຮົ່ມປະຈຸບັນ).
3. ຕາແສງ ນາທຽມ ເມືອງ ນາຊາຍທອງ.
4. ຕາແສງ ແມດ ເມືອງ ກາສີ.
5. ຕາແສງ ເມືອງ ເຟືອງ ເມືອງ ວັງວຽງ.
6. ຕາແສງ ບ້ານ ຊ້າງເກົ່າ ເມືອງ ໄຊທານີ.
7. ບ້ານ ເພຍລາດ ເມືອງ ນາຊາຍທອງ.
8. ບ້ານ ນາຍາງ ເມືອງ ນາຊາຍທອງ.
9. ບ້ານ ນ້ຳຮວາງ ເມືອງ ກາສີ.
10. ບ້ານ ນາອ່າງ ເມືອງ ຊະນະຄາມ.
11. ບ້ານ ດົງບັງ ເມືອງ ໄຊທານີ.

ບຸກຄົນ ໄດ້ຮັບນາມມະຍົດ ວິລະຊົນ ມີ:

1. ສະຫາຍ ສີທອງ ກອງພັນ 500 (ເສຍສະຫລະ).
2. ສະຫາຍ ເພຍຫລວງ ຄະນະພັກ ແຂວງ ວຽງຈັນ.
3. ສະຫາຍ ລີຈາງເຮີ ບ້ານ ພູສາມເສົ້າ.
4. ສະຫາຍ ນາງ ຈຳປາ ພະນັກງານພື້ນຖານ ບ້ານ ໂນນນາຊຳ,.
5. ສະຫາຍ ນາງ ພວງ (ແມ່ຫອມ) ບ້ານ ທ່າດິນແດງ (ເສຍສະຫລະ).
6. ສະຫາຍ ນາງ ບົວຄຳ ບ້ານ ນ້ຳປົດ. (ເສຍສະຫລະ).

7. ສະຫາຍ ນາງ ແກ້ວ ບ້ານ ນ້ຳປົດ. (ເສຍສະຫລະ).
8. ສະຫາຍ ນາງ ພັນ ບ້ານ ດົງນາຊຶກ. (ເສຍສະຫລະ).
9. ສະຫາຍ ຕີ ບ້ານ ນ້ຳຮວາງ. (ເສຍສະຫລະ).
10. ສະຫາຍ ທິດກັນຫາ ບ້ານ ນ້ຳຮວາງ. (ເສຍສະຫລະ).
11. ສະຫາຍ ຊ້ອມ ບ້ານ ນາກ້າງປາ. (ເສຍສະຫລະ).

ໄດ້ຮັບນາມມະຍົດ ນັກຮົບແຂ່ງຂັນ ຢູ່ເຂດວຽງຈັນ ມີ:

1. ຕາແສງ ນ້ຳສັງ ເມືອງ ນາຊາຍທອງ.
2. ຕາແສງ ລອງລຶກ ເມືອງ ແກ້ວອຸດົມ.
3. ຕາແສງ ນາເຫລື້ອງ ເມືອງ ທຸລະຄົມ.
4. ຕາແສງ ນາກ້າງປາ ເມືອງ ກາສີ.
5. ຕາແສງ ປາກງົວ ເມືອງ ວັງວຽງ.
6. ບ້ານ ວັງມ້າ ເມືອງ ນາຊາຍທອງ.
7. ບ້ານ ເຕົາໄຫ ເມືອງ ນາຊາຍທອງ.
8. ບ້ານ ນາໝ້ຽງ ເມືອງ ນາຊາຍທອງ
9. ບ້ານ ໄຮ່ໃຕ້ ເມືອງ ນາຊາຍທອງ.
10. ບ້ານ ນາຕານ ເມືອງ ນາຊາຍທອງ.
11. ບ້ານ ນາຫອຍ ເມືອງ ນາຊາຍທອງ.
12. ບ້ານ ທ່ານາຂາມ ເມືອງ ນາຊາຍທອງ.
13. ບ້ານ ນ້ຳເຟືອງ ເມືອງ ກາສີ.
14. ບ້ານ ສະຫງ່ຳ ເມືອງ ທຸລະຄົມ.
15. ບ້ານ ແກ້ງນ້ອຍ ເມືອງ ທຸລະຄົມ.
16. ບ້ານ ເວີນ ເມືອງ ທຸລະຄົມ.
17. ບ້ານ ນາຫລວງ ເມືອງ ທຸລະຄົມ.
18. ບ້ານ ນາທູມ ເມືອງ ວັງວຽງ.
19. ບ້ານ ນາແຊງ ເມືອງ ວັງວຽງ.
20. ບ້ານ ໂນນ ເມືອງ ນາຊາຍທອງ.
21. ບ້ານ ປາກຊາບ ເມືອງ ໄຊທານີ.
22. ບ້ານ ທ່າດິນແດງ ເມືອງ ໄຊທານີ.

ບຸກຄົນ ເປັນນັກຮົບ ແຂ່ງຂັນ ມີຄື:

1. ສະຫາຍ ສອນ.
2. ສະຫາຍ ແມ່ອິນປັນຍາ.
3. ສະຫາຍ ເລຍມາລໍ.
4. ສະຫາຍ ຕິງເນັ້ງວາຊິ້ງ.
5. ສະຫາຍ ພິມມະໄຊ.
6. ສະຫາຍ ຊົວປາວທໍ.
7. ສະຫາຍ ທອງສຸກຊິ້ງ.
8. ສະຫາຍ ບຸນລີມ.
9. ສະຫາຍ ທອງເຕັມ.
10. ສະຫາຍ ພໍ່ເກົ້ອ.
11. ສະຫາຍ ຕິງຊົວຕິ້ງ.

ມີຜູ້ໄດ້ຮັບໜຽນໄຊ ອິດສະຫລະ, ໜຽນໄຊພິລະອາດຫານ ແລະ ກາຕ້ານຝຣັ່ງ773 ໜ່ວຍ, ກາຕ້ານອາເມລິກາ 1380 ໜ່ວຍ, ໃບຍ້ອງຍໍລັດຖະບານ 1828 ໃບ, ໃບປະເທດຊາດຈາລຶກ ບຸນຄຸນ 1140 ໃບ.

ຈາກນັ້ນ ມາທ້າຍປີ 1979, ສູນກາງພັກ ໄດ້ເປີດກອງປະຊຸມ: " ປັບປຸງລະບົບການຈັດຕັ້ງ ຊີ້ນຳການຟື້ນຟູ ລະບົບການເມືອງ, ເສດຖະກິດ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ " ໃນກອງປະຊຸມນີ້, ແຂວງ ນະຄອນຫລວງວຽງຈັນ ໄດ້ຮັບການຍົກຍ້ອງເປັນຕົວແບບທີ່ຊີ້ນຳໄດ້ດີ, ເຕົ້າໂຮມໄດ້ຄວາມສາມາດຂອງທຸກຊັ້ນຄົນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາ.

ມາຮອດວັນທີ 20 ມັງກອນ ປີ 1980 ວັນສ້າງຕັ້ງກອງທັບ ປະ ຊາຊົນລາວ ຄົບຮອບ 21 ປີ, ປະຊາຊົນລາວກໍ່ຄືຊາວນະຄອນຫລວງວຽງຈັນ ໄດ້ຟົດຟື້ນກັບການຕ້ອນຮັບຜົນງານອັນໃຫຍ່ ຫລວງ, ນັ້ນກໍ່ແມ່ນ ການປະກາດການມອບບັນດາຜົນງານການຍ້ອງຍໍ ແລະ ປະດັບຊັ້ນ ໃຫ້ແກ່ ບັນດາພະນັກງານ, ນັກຮົບ, ທະຫານ, ຕຳຫລວດ ແລະ ປະຊາຊົນລາວບັນດາເຜົ່າ ທີ່ໄດ້ຜ່ານຜ່າ ຈາກສົງຄາມກອບກູ້ປະເທດຊາດຂອງລາວ ມານານກວ່າ 30 ປີ.

ຕໍ່ມາ ປີ 1980 ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ຮັບການປັບປຸງບູລະນະ ອີກຄັ້ງໃໝ່ ນັບແຕ່ຂັ້ນ ນະຄອນຫລວງ ລົງຮອດຂັ້ນເມືອງ, ຕາແສງ ແລະ ບ້ານ; ຢູ່ຂັ້ນ ນະຄອນ ຫລວງ ປະກອບມີກຳມະການ ສູນກາງພັກ ແລະ ກຳມະການ ປົກຄອງທ້ອງຖິ່ນ ທັງໝົດ 27 ສະ ຫາຍ, ໂດຍແມ່ນ **ທ່ານ ສີສະຫວາດ ແກ້ວບຸນພັນ** ກຳມະການສູນກາງພັກ ເປັນເລຂາຄະນະພັກ



ທ່ານ ເພົ້າ ພົມມະຈັນ
ປະທານປົກຄອງ
ນະຄອນຫລວງວຽງຈັນ
ປີ 1975 - 1983

ນະຄອນຫຼວງວຽງຈັນ, **ທ່ານ ໝື່ນ ສົມວິຈິດ** ກຳມະການສູນກາງພັກ ເປັນຮອງເລຂາ, **ທ່ານ ເພົ້າ ພົມມະຈັນ** ເປັນປະທານປົກຄອງນະຄອນ ຫລວງວຽງຈັນ. ຄະນະພັກ - ອຳນາດການປົກຄອງ ນະຄອນຫລວງ ວຽງຈັນ. ຄັ້ງນີ້ໄດ້ສືບຕໍ່ຊີ້ນຳ - ນຳພາປຸກລະດົມ ປະຊາຊົນ ເປັນເຈົ້າ ການເຂົ້າຮ່ວມຂະບວນການຟື້ນຟູ ແລະ ກໍ່ສ້າງເສດຖະກິດ - ສັງຄົມ ໂດຍສຸມໃສ່ການຜະລິດສະບຽງອາຫານ ເຮັດໃຫ້ມີຜົນຜະລິດ ເພີ່ມຂຶ້ນ ເກີນຄາດໝາຍ, ປີ 1980 ທຽບໃສ່ ປີ 1976 ສະເພາະ ເຂົ້າກິນ ໄດ້ ເພີ່ມຂຶ້ນເຖິງ 90%, ເນື້ອທີ່ນາ ເພີ່ມຂຶ້ນ75%, ເນື້ອທີ່ປູກພືດສຳຮອງ ເພີ່ມຂຶ້ນ 80%[1]. ດ້ວຍເຫດນັ້ນຊີວິດການເປັນຢູ່ຂອງປະຊາຊົນ, ທະ ຫານ, ຕຳຫລວດ, ລັດຖະການໃນນະຄອນຫລວງວຽງຈັນ ຈຶ່ງໄດ້ຮັບ ການປັບປຸງດີຂຶ້ນເປັນກ້າວໆ, ສາມາດແກ້ໄຂໄດ້ຄວາມຫຍຸ້ງຍາກດ້ານສະບຽງອາຫານ, ອຸປະ ໂພກ ແລະ ບໍລິໂພກ ເປັນສ່ວນໃຫຍ່. ດ້ານວຽກງານ ປກຊ - ປກສ ແມ່ນມີຄວາມສະຫງົບ, ມີ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ຢູ່ບັນດາເມືອງ ທີ່ມີຊາຍແດນຕິດກັບ ປະເທດ ໄທ ລຽບຕາມຝັ່ງແມ່ນ້ຳຂອງໄດ້ຈັດຕັ້ງ, ປັບປຸງກຳລັງກອງໝອນ, ກອງປ້ອງກັນຕົວຂອງປະຊາຊົນ ສົມທົບກັບກຳລັງທ້ອງຖິ່ນ ແລະ ກຳລັງຫລວງເຄື່ອນໄຫວໄດ້ດີພໍຄວນ. ດ້ານວຽກງານຄົມມະນາ ຄົມຂົນສົ່ງແມ່ນເລັ່ງໃສ່ກໍ່ສ້າງເສັ້ນທາງໃໝ່, ແປງທາງເກົ່າ ແລະ ຟື້ນຟູຂົວເກົ່າ, ສ້າງຂົວໃໝ່ໄດ້ ຫລາຍແຫ່ງ. ໃນນັ້ນການໄດ້ສຳເລັດກໍ່ສ້າງຂົວຂ້າມ ນ້ຳງື່ມ ຢູ່ເມືອງ ປາກງື່ມ, ປະຈຸບັນຊຶ່ງເປັນ ຂົວສຳຄັນ, ເປັນຍຸດທະສາດໜຶ່ງໃນການຟື້ນຟູເສດຖະກິດຢູ່ນະຄອນຫລວງວຽງຈັນ ຕິດລຽນກັບ ບັນດາແຂວງພາກກາງ, ພາກໃຕ້ລາວ ໃສ່ຊື່ວ່າ: “ **ຂົວສີຫອງ** ”. ທັງໝົດນັ້ນ ໄດ້ສ້າງເງື່ອນໄຂ ແລະ ພື້ນຖານອັນໜັກແໜ້ນ ໃຫ້ແກ່ການກໍ່ສ້າງ ນະຄອນຫລວງ ຂອງປະເທດຊາດ, ຢັ້ງຢືນເຖິງ ລັກສະນະດີເລີດ ແລະ ທາດແທ້ອັນຈົບງາມຂອງລະບອບໃໝ່ ໂດຍມີພັກ ປະຊາຊົນ ປະຕິວັດ ລາວ ເປັນຜູ້ນຳພາ.

---

1. ບັນດາເມືອງ ທີ່ມີການຜະລິດ ເຂົ້າຫລາຍທີ່ສຸດ ຢູ່ນະຄອນຫລວງວຽງຈັນ ຄື: ເມືອງ ນາຊາຍທອງ, ເມືອງ ຫາດ ຊາຍຟອງ, ເມືອງ ໄຊທານີ, ປາກງື່ມ, ປະຊາຊົນ 80% ແມ່ນເຮັດນາ.



ຂົວ ສີທອງ ຢູ່ເມືອງ ປາກງື່ມ, ນະຄອນຫລວງວຽງຈັນ

ໃນວັນທີ 20/12/1980, ສູນກາງໄດ້ຈັດກອງປະຊຸມເປີດກວ້າງ ເພື່ອສັງເກດຕີລາຄາ ແລະ ປະເມີນຜົນ 5 ປີ ປະຕິບັດສອງໜ້າທີ່ ຍຸດທະສາດ ແລະ ແຜນການ 3 ປີ ແຫ່ງການກໍ່ສ້າງ ແລະ ປັບປຸງລັດ ປະຊາທິປະໄຕ ປະຊາຊົນ. ກອງປະຊຸມ ໄດ້ສັງເກດສະພາບການຮອບດ້ານ ເຫັນວ່າ ແຂວງ ນະຄອນຫລວງວຽງຈັນ ມີຄວາມຄືບໜ້າ ຫລາຍດ້ານ ບໍ່ວ່າໃນດ້ານການປັບປຸງ ກໍ່ສ້າງ ການຈັດຕັ້ງພັກ ອຳນາດການປົກຄອງ, ບັນດາອົງການ ຈັດຕັ້ງຂອງມະຫາຊົນ, ວຽກງານປ້ອງກັນ ຊາດ - ປ້ອງກັນຄວາມສະຫງົບ ລວມໄປເຖິງການພັດທະນາ ເສດຖະກິດ - ສັງຄົມ ລ້ວນແຕ່ມີ ປັດໄຈໃໝ່ເກີດຂຶ້ນ, ສູນກາງ ຈຶ່ງເລືອກໃຫ້ເປັນແຂວງດີເດັ່ນ ໃນການປະຕິບັດບັນດາ ມະຕິຂອງ ພັກ, ເປັນຜົນສຳເລັດໃນຂັ້ນພື້ນຖານ. ແຕ່ກໍ່ສັງເກດ ເຫັນຈຸດອ່ອນ ຂໍ້ຄົງຄ້າງບາງປະການ; ພື້ນທີ່ ແຂວງ ນະຄອນຫລວງວຽງຈັນ ຍັງມີສັດຕູເຄື່ອນໄຫວມ້າງເພລະບອບໃໝ່, ການປັບປຸງຮາກ ຖານການເມືອງ, ການບຳລຸງທາດແທ້ປະຕິວັດ ຂອງກອງປະກອບອາວຸດ ບໍ່ທັນເຖິງຖອງ, ວຽກ ງານວັດທະນະທຳ - ສັງຄົມ ຄືບໜ້າຊ້າ, ຄວາມຕື່ນຕົວທາງ ການເມືອງ ຂອງປະຊາຊົນ ບັນດາ ຊັ້ນຄົນມີຂີດຈຳກັດ. ສາຍເຫດຍ້ອນວ່າ: ຂອບເຂດຄວບຄຸມຄຸ້ມຄອງຂອງແຂວງ ນະຄອນຫລວງ

ວຽງຈັນ ກວ້າງໃຫຍ່ ມີທັງຕົວເມືອງ ໃນເຫດສະບານຂອງນະຄອນຫລວງ, ຕົວເມືອງໃນເຂດຊົນນະບົດພູດອຍ, ໃນຂະນະທີ່ພະນັກງານມີຈຳກັດ ຈຶ່ງບໍ່ສາມາດນຳພາ ແລະ ຄຸ້ມຄອງໃຫ້ທົ່ວເຖິງ ແລະ ແທດກັບຕົວຈິງ.

ໃນເດືອນ 8/1981 ກົມການເມືອງ ສູນກາງພັກ ໄດ້ອອກມະຕິ ແຍກແຂວງ ນະຄອນຫລວງວຽງຈັນ ອອກເປັນສອງແຂວງຄື: ນະຄອນຫລວງວຽງຈັນ ແລະ ແຂວງວຽງຈັນ, ຊຶ່ງແຕ່ລະແຂວງກໍ່ມີ ຄະນະພັກ, ຄະນະປົກຄອງ ແລະ ການຈັດຕັ້ງອື່ນໆ ປະກອບເຂົ້າ ເປັນໂຄງສ້າງ ຂອງແຂວງໜຶ່ງ.

ມາໃນວັນທີ 13/8/1981, ທ່ານ ໝູຮັກ ພູມສະຫວັນ ກຳມະການກົມ ການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການ ລັດຖະບານ ໃນເວລານັ້ນ ໄດ້ເຊັນ ຂໍ້ຕົກລົງ ແຍກນະຄອນຫລວງວຽງຈັນ ແລະ ແຂວງວຽງຈັນ. ພ້ອມທັງ ໄດ້ແຕ່ງຕັ້ງ ຄະນະຮັບຜິດຊອບໜຶ່ງ ຂຶ້ນ ເພື່ອກຳນົດ ພາລະບົດບາດ, ຂອບເຂດສິດໜ້າທີ່ ໂຄງປະກອບການ ຈັດຕັ້ງ ແລະ ການປະກອບພະນັກງານ ໃຫ້ແກ່ສຳລັບ ສອງແຂວງ ທີ່ແຍກຕົວອອກຈາກກັນ. **ທ່ານ ສີສົມພອນ ລໍວັນໄຊ** ກຳມະການກົມການເມືອງສູນກາງພັກ, ຫົວໜ້າຈັດຕັ້ງສູນກາງພັກ ໄດ້ຖືກແຕ່ງຕັ້ງເປັນ ຫົວໜ້າປັບປຸງສອງແຂວງ ທີ່ແຍກອອກຈາກກັນ ອັນປະກອບດ້ວຍ ບັນດາທ່ານ ທີ່ເປັນຄະນະລວມມີ:

1. ທ່ານ ສາລີ ວົງຄຳຊາວ	ຄະນະເລຂາ ສູນກາງພັກ.
2. ທ່ານ ຈັນມີ ດວງບຸດດີ	ກຳມະການ ສູນກາງພັກ
3. ທ່ານ ທິດມ່ວນ ສາວຈັນທະລາ	ກຳມະການ ສູນກາງພັກ
4. ທ່ານ ໝື່ນ ສົມວິຈິດ	ກຳມະການ ສູນກາງພັກ

ແຕ່ງຕັ້ງໜ່ວຍງານ ສັບຊ້ອນບຸກຄະລາກອນ ແລະ ແບ່ງປັນພາຫະນະ, ເຂດແດນລະຫວ່າງ ນະຄອນຫລວງວຽງຈັນ ແລະ ແຂວງ ວຽງຈັນ ປະກອບມີ:

1. ທ່ານ ເພົ້າ ພິມມະຈັນ.
2. ທ່ານ ບຸນມາ ມີທອງ.
3. ທ່ານ ຄຳໄພ ອຸ່ນດາລາ.
4. ທ່ານ ທອງດຳ ມະນີວັນ.
5. ທ່ານ ຈານຕັນ (ພໍ່ຕຽງ).
6. ທ່ານ ທອງດຳ ຈັນທະພອນ.
7. ທ່ານ ຍີ (ຈັດຕັ້ງສູນກາງ).

ແຕ່ງຕັ້ງ ພະນັກງານ ບຸກຄະລາກອນ ປະກອບເຂົ້າ ອົງຄະນະພັກ ແລະ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ແລະ ແຂວງ ວຽງຈັນ (ເລກທີ 05/ ກມສພ, ວັນທີ 13/ 8/1981) ປະກອບມີບັນດາ ສະຫາຍ ດັ່ງນີ້:

1. ທ່ານ ບຸນມາ ມີທອງ ວ່າການເປັນ ເລຂາຄະນະພັກ.

2. ທ່ານ ເພົ້າ ພິມມະຈັນ ເປັນຮອງ ເລຂາ ຄະນະພັກ ທັງເປັນເຈົ້າຄອງ ນະຄອນຫລວງ ວຽງຈັນ (ຫລື ປະທານປົກຄອງ ນະຄອນຫລວງ).

3. ທ່ານ ທອງມະນີ ທິພິມມະຈັນ ເປັນກຳມະການ.

4. ທ່ານ ຈານນອງ ອິນທະວົງ ເປັນກຳມະການ.

5. ທ່ານ ວິສອນ ເປັນກຳມະການ.

6. ທ່ານ ພອນໄຊ ເປັນກຳມະການ.

7. ທ່ານ ຄຳຍອດ ເປັນກຳມະການ.

8. ທ່ານ ທອງເພັດ ສຸລິວົງ ເປັນກຳມະການ.

9. ທ່ານ ອິນແປງ ເປັນກຳມະການ.

10. ທ່ານ ນາງ ສົມໝາຍ ວົງນະຄອນ ເປັນກຳມະການ (ນາງສົມໝາຍໃຫຍ່).

ມາໃນຕົ້ນປີ 1982, ສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ແຕ່ງຕັ້ງຄະນະຊີ້ນຳ ນຳພາ ນະຄອນຫລວງ ຕື່ມອີກ ຊຶ່ງປະກອບດ້ວຍບັນດາທ່ານ:

1. ທ່ານ ສີສະຫວາດ ແກ້ວບຸນພັນ ກຳມະການສູນກາງພັກ, ເລຂາທິການສູນກາງ ພັກເປັນ ຫົວໜ້າ.

2. ທ່ານ ໝື່ນ ສົມວິຈິດ ກຳມະການສູນກາງພັກ ເປັນຮອງ.

3. ທ່ານ ທອງດຳ ຈັນທະພອນ ເປັນກຳມະການ.

4. ທ່ານ ເພົ້າ ພິມມະຈັນ ເປັນກຳມະການ ທັງເປັນປະທານປົກຄອງ ນະຄອນຫຼວງ ວຽງຈັນ.

ລວມຄວາມວ່າ: ຜ່ານການປະຕິບັດ ແຜນນະໂຍບາຍກໍ່ສ້າງ ແລະ ປັບປຸງ ນະຄອນຫຼວງ ວຽງຈັນ ຮອບດ້ານ ໄດ້ເຮັດໃຫ້ຈຸດໝາຍ ພື້ນຖານ ການບູລະນະ ລະບອບປະຊາທິປະໄຕ ປະຊາຊົນໃນຊຸມປີທຳອິດ ພາຍຫລັງທີ່ປະເທດຊາດ ໄດ້ຮັບການປົດປ່ອຍ (1976 -1981) ໄດ້ສຳເລັດ ໂດຍພື້ນຖານ: ການຈັດຕັ້ງອຳນາດການປົກຄອງທຸກຂັ້ນໄດ້ຮັບການປັບປຸງ, ກຳລັງປະກອບອາວຸດຂອງການປະຕິວັດ ໄດ້ບຳລຸງສ້າງ ທາງດ້ານທາດແທ້ ການຜະລິດສະບຽງອາຫານມີປັດໄຈໃໝ່ເກີດຂຶ້ນ, ຮູບການບໍລິການການຄ້າແບບໃໝ່ໄດ້ກໍ່ຕົວຂຶ້ນ; ໄພພິບັດດ້ານວັດທະນະທຳ - ສັງຄົມ ທີ່ລະບອບເກົ່າປະໄວ້ໄດ້ຊຳລະສະສາງໂດຍພື້ນຖານ; ເນື້ອທີ່ເຄື່ອນໄຫວເພື່ອທຳລາຍມ້າງ

ເພລະບອບໃໝ່ຂອງບັນດາອິດທິກຳລັງປໍລະປັກແຄບເຂົ້າ; ຄວາມສະຫງົບດ້ານການເມືອງແລະ ຄວາມເປັນລະບຽບຮຽບຮ້ອຍ ດ້ານສັງຄົມ ມີທ່າອ່ຽງດີຂຶ້ນ ເປັນລຳດັບ.

ຄ. ນະຄອນຫລວງວຽງຈັນ ໃນສະໄໝປະຕິບັດກົນໄກເສດຖະກິດເກື້ອກູນ (ປີ 1982 - 1986).

ມາເຖິງປີ 1982, ກອງປະຊຸມໃຫຍ່ຂອງພັກ ປະຊາຊົນ ປະຕິວັດລາວ ຄັ້ງທີ III ໄດ້ດຳເນີນ ຢູ່ໃນນະຄອນຫລວງວຽງຈັນ. ເປັນກຽດຕາງໜ້າໃຫ້ແກ່ສະມາຊິກພັກ, ພະນັກງານ, ພາລະກອນ, ປະຊາຊົນ ຊັ້ນຄົນຕ່າງໆ ເຂົ້າຮ່ວມກອງປະຊຸມຄັ້ງ ປະຫວັດສາດ ຂອງພັກຄັ້ງນີ້, ຄະນະພັກ, ຄະ ນະ ປົກຄອງ ນະຄອນຫລວງວຽງຈັນ ນຳໂດຍ **ທ່ານ ບຸນມາ ມີທອງ** ເລຂາຄະນະພັກ, **ທ່ານ ເພົ້າ ພິມມະຈັນ** ປະທານປົກຄອງ ນະຄອນຫລວງວຽງຈັນ ພ້ອມກັບບັນດາການນຳຂັ້ນເມືອງ, ຕົວ ແທນອົງການຈັດຕັ້ງມະຫາຊົນ, ສາສະໜາ ແລະ ພະນັກງານ ອາວຸໂສປະຕິວັດ ຈຳນວນໜຶ່ງ ເຂົ້າຮ່ວມ.



ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ ປະຊາຊົນ ປະຕິວັດລາວ ວັນທີ 27 - 30 ເມສາ ປີ 1982.

ທ່ານ ບຸນມາ ມີທອງ ເລຂາຄະນະພັກ ໄດ້ຕາງໜ້າໃຫ້ຊາວ ນະຄອນຫລວງວຽງຈັນ ກວ່າ 700.000 ຄົນ ຂຶ້ນລາຍງານ ຜົນງານ 7 ປີ ແຫ່ງການກໍ່ສ້າງ ແລະ ດັດສ້າງສັງຄົມນິຍົມ ຢູ່ ນະ ຄອນຫລວງວຽງຈັນ ຕໍ່ຜູ້ແທນກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ. ໃນບົດລາຍງານ ດັ່ງກ່າວໄດ້ ເນັ້ນໜັກເຖິງຜົນງານ, ຂໍ້ຄົງຄ້າງ, ສາຍເຫດໃນການຜະລິດ, ການແກ້ໄຂ ຊີວິດການເປັນຢູ່ ຂອງ ປະຊາຊົນໃນ ນະຄອນຫລວງ ກໍ່ຄືບັນດາເມືອງອ້ອມຂ້າງ, ຜົນງານໃນວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຕະຫລອດ 7 ປີ ທີ່ຜ່ານມາ (1975 - 1982).

ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ ປະຊາຊົນປະຕິວັດລາວ ໄດ້ກຳນົດທິດທາງ, ແຜນ ການ ແລະ ໜ້າທີ່ລວມຂອງປະເທດຊາດ ໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ, ລວມທັງ ຮັບຮອງເອົາທິດທາງ, ໜ້າທີ່ແຜນການພັດທະນາເສດຖະກິດ - ສັງຄົມ 5 ປີ ເທື່ອທີ I (1981 - 1985), ຮັບຮອງເອົາກົດລະບຽບຂອງພັກ ແລະ ເລືອກຕັ້ງຄະນະບໍລິຫານງານສູນກາງພັກ ຊຸດ ໃໝ່ ລວມມີກຳມະການສົມບູນ 49 ສະຫາຍ, ກຳມະການສຳຮອງ 6 ສະຫາຍ ❶.

ພາຍຫລັງກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ ປະຊາຊົນ ປະຕິວັດລາວ ສຳເລັດຜົນຢ່າງ ຈົບງາມແລ້ວ, ຄະນະພັກ - ຄະນະປົກຄອງ ນະຄອນຫລວງວຽງຈັນ ໄດ້ຫັນມະຕິຂອງກອງປະ ຊຸມໃຫຍ່ ດັ່ງກ່າວ ເປັນແຜນຍຸດທະສາດ, ແຜນການອັນລະອຽດ ສຳລັບ ນະຄອນຫລວງວຽງຈັນ ຊຶ່ງປະກອບມີ ເນື້ອໃນຈິດໃຈ ຕົ້ນຕໍ ດັ່ງນີ້:

ສືບຕໍ່ດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ, ດຳເນີນການປະຕິວັດ 3 ດ້ານໄປພ້ອມໆກັນຄື: ການປະຕິວັດການພົວພັນການຜະລິດ, ການປະຕິວັດທາງດ້ານວິທະຍາສາດເຕັກນິກ ແລະການ ປະຕິວັດທາງດ້ານວັດທະນະທຳ - ແນວຄິດ. ທັງໝົດນີ້, ແມ່ນແນໃສ່ເຮັດໃຫ້ ນະຄອນຫລວງ ວຽງຈັນ ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດ - ສັງຄົມ ມີການຂະ ຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ພະນັກງານທະຫານ, ຕຳຫລວດ, ແລະ ປະຊາຊົນ ໄດ້ ຮັບການປັບປຸງດີຂຶ້ນ. ໃນການຈັດຕັ້ງປະຕິບັດທິດທາງແຜນການດັ່ງກ່າວ, ຢູ່ນະຄອນຫລວງວຽງ ຈັນ ຍັງໄດ້ສືບຕໍ່ ຫັນບັນດາໂຮງຈັກ, ໂຮງງານ, ຫ້ວໜ່ວຍ ທຸລະກິດ ມາເປັນກຳມະສິດຂອງ "ລັດ ເຊັ່ນ: ໂຮງງານ ຢາສູບ, ໂຮງງານ ເບຍ, ໂຮງງານ ນ້ຳຫວານ, ໂຮງງານ ສັງກະສີ, ໂຮງງານ ຊີມັງ ແລະ ໂຮງງານອື່ນໆ. ໃນດ້ານກະສິກຳກໍ່ພະຍາຍາມຫັນເປັນສະຫະກອນກະເສດ, ເປັນກຳມະ ສິດລວມໝູ່, ໂດຍປະຕິບັດຕາມແຜນການແບບລວມສູນ ມອບໝາຍຕົວເລກ ໃນການຜະລິດທຸ ລະກິດ; ໃນດ້ານການຄ້າກໍ່ມີຄວາມພະຍາຍາມຂະຫຍາຍ ໃຫ້ເປັນການຄ້າຂອງລັດ ແລະ ລວມ ໝູ່, ຈຳກັດຮັດແຄບການຄ້າຂອງເອກະຊົນ, ເພີ່ມທະວີການຕັ້ງດ່ານກວດກາ ການຈາລະຈອນ ສິນຄ້າໃນທົ່ວປະເທດ ເປັນຕົ້ນ ແມ່ນຢູ່ບໍລິເວນຊາຍແດນລາວ - ໄທ. ທັງນີ້ ກໍ່ເພື່ອເຮັດໃຫ້ການ ດັດສ້າງສັງຄົມນິຍົມຢູ່ນະຄອນຫລວງວຽງຈັນ ສຳເລັດຜົນໂດຍໄວ. ໃນດ້ານວັດທະນະທຳ - ສັງ ຄົມ ກໍ່ມີຄວາມພະຍາຍາມໃນການຂະຫຍາຍການສຶກສາ, ລົບລ້າງການກົກໜັງສືຢູ່ໃນໝູ່ປະຊາ ຊົນ, ຂະຫຍາຍຕາໜ່າງສາທາລະນະສຸກ ກໍ່ຄືການບໍລິການທາງດ້ານການແພດ ໃຫ້ກວ້າງຂວາງ ຂຶ້ນກວ່າເກົ່າ.

---

1. ປະຫວັດສາດພັກປະຊາຊົນປະຕິວັດລາວ 1997, ໜ້າ 230.

ທ່ານກາງຊາວ ນະຄອນຫລວງວຽງຈັນ ພວມຟົດຟື້ນຜັນຂະຫຍາຍ ບັນດາມະຕິ ທິດທາງ ຂອງກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກປະຊາຊົນປະຕິວັດລາວ ແລະ ທິດທາງ, ແຜນການຍຸດ ທະສາດຂອງຕົນຢູ່ນັ້ນ, ມາຮອດ ວັນທີ 22-23/2/1983 ຊາວນະຄອນຫລວງວຽງຈັນ ກໍ່ໄດ້ຮັບ ກຽດຕ້ອນຮັບ ແລະ ເປັນເຈົ້າພາບຈັດກອງປະຊຸມຂັ້ນສຸດຍອດ ຄັ້ງທຳອິດຂອງ 3 ປະເທດ ອິນດູ ຈີນ (ລາວ - ຫວຽດນາມ - ກຳປູເຈຍ), ຝ່າຍລາວມີ ປະທານ ໄກສອນ ພົມວິຫານ ເລຂາທິ ການໃຫຍ່ ພັກປະຊາຊົນປະຕິວັດລາວ, ປະທານ **ສຸພານຸວົງ** ປະທານປະເທດ ສປປ ລາວ; ຫວຽດນາມ ມີທ່ານເລຂາທິການໃຫຍ່ **ເລຢວນ** ແລະ ທ່ານ **ຟາມວັນດົ່ງ** ປະທານ ສະພາລັດຖະ ມົນຕີ; ກຳປູເຈຍ ມີທ່ານ ເລຂາທິການໃຫຍ່ **ເຮັງຊຳລິນ** ແລະ **ທ່ານ ຈັນສີ** ປະທານ ສະພາລັດ ຖະມົນຕີ, ວັດຖຸປະສົງຂອງກອງປະຊຸມ ແມ່ນເພື່ອເພີ່ມທະວີຮັດແໜ້ນຄວາມສາມັກຄີ ຮ່ວມສຳ ພັນສູ້ຮົບ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ - ຫວຽດນາມ - ກຳປູເຈຍ ທີ່ມີມູນເຊື້ອ ມາແລ້ວ ໃຫ້ສືບຕໍ່ຂະຫຍາຍຕົວ ແລະ ແໜ້ນແຟ້ນຕື່ມອີກ.

ມາຮອດໄລຍະ ປີ 1983 -1984, ອີງໃສ່ການ ຕົກລົງ ຂອງສູນກາງພັກ ນະຄອນຫລວງ ວຽງຈັນ ໄດ້ຮັບກຽດເປັນເຈົ້າພາບ ໃຫ້ແກ່ບັນດາອົງການຈັດຕັ້ງມະຫາຊົນກະກຽມ ແລະ ດຳເນີນ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຂອງແຕ່ລະອົງການຈັດຕັ້ງຂຶ້ນ ເພື່ອກຳນົດໂຄງການດຳ ເນີນງານ, ກຳນົດກົດລະບຽບ ແລະ ເລືອກຕັ້ງ ຄະນະບໍລິຫານງານ ຊຸດໃໝ່ ເຊັ່ນ: ວັນທີ 27/ 4/ 1983 ກອງປະຊຸມໃຫຍ່ ຜູ້ແທນຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຄັ້ງທຳອິດ; ວັນທີ 14/ 11/ 1983 ກອງປະຊຸມໃຫຍ່ ຜູ້ແທນກຳມະບານລາວ ຄັ້ງທີ I[1]; ວັນທີ 21/3/1984 ກອງປະຊຸມໃຫຍ່ ຜູ້ແທນແມ່ຍິງລາວ ຄັ້ງທີ I ; ບັນດາຜົນສຳເລັດອັນໃຫຍ່ຫລວງ ຂອງກອງປະຊຸມໃຫຍ່ບັນດາອົງ ການຈັດຕັ້ງມະຫາຊົນທີ່ໄຂຂຶ້ນຢູ່ ນະຄອນຫລວງວຽງຈັນ ໃນຄັ້ງນັ້ນ, ແມ່ນມີການປະກອບສ່ວນ ອັນສຳຄັນຂອງອຳນາດການປົກຄອງ ກໍ່ຄືຊາວ ນະຄອນຫລວງວຽງຈັນ ນັບທັງດ້ານວັດຖຸ ແລະ ຈິດໃຈ. ກອງປະຊຸມໃຫຍ່ ຂອງບັນດາອົງການຈັດຕັ້ງມະຫາຊົນ ແມ່ນສະແດງເຖິງຄວາມເຕີບ ໃຫຍ່ຂະຫຍາຍຕົວ ຂອງຂະບວນການອົງການຈັດຕັ້ງມະຫາຊົນ ພາຍໃຕ້ການນຳພາຂອງພັກປະ ຊາຊົນປະຕິວັດລາວ, ທັງເປັນການປຸກລະດົມ ເຕົ້າໂຮມກຳລັງແຮງ ຂອງມະຫາຊົນ ເຂົ້າໃນການ ປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ແຂງແຮງ.

---

1. ກອງປະຊຸມກຳມະບານລາວ ໄດ້ຕົກລົງເອົາ ວັນທີ 1 ກຸມພາ 1956 ເປັນມື້ສ້າງຕັ້ງ " ກຳມະບານລາວ " ປະ ຫວັດສາດ ພັກ ປະຊາຊົນ ປະຕິວັດລາວ, ປີ 1997, ໜ້າ 233.

ເດືອນ 6/1984, ທ່ານກາງຂະບວນການ ແຂ່ງຂັນ ປົກປັກຮັກສາ ແລະ ສ້າງສາ ພັດທະນາ ຕົນໃນຮອບດ້ານ ຂອງຊາວ ນະຄອນຫລວງວຽງຈັນ ກຳລັງເປັນຂະບວນຟົດຟື້ນຢູ່ນັ້ນ, ຢູ່ແຂວງ ໄຊຍະບູລີ ໄດ້ຖືກກຸ່ມປະຕິການຂວາຈັດໄທ ນຳເອົາກຳລັງ ເປີດບັ້ນບຸກຕີ ບຽດຢຶດ ເຂົ້າສາມໝູ່ ບ້ານ: ບ້ານ ໃໝ່, ບ້ານ ກາງ, ບ້ານ ສະຫວ່າງ ຂຶ້ນກັບ ເມືອງ ປາກລາຍ ແຂວງ ໄຊຍະບູລີ, ຄະ ນະພັກ, ອຳນາດການປົກຄອງ ກໍ່ຄືຊາວ ນະຄອນຫລວງວຽງຈັນ ກໍ່ໄດ້ສົ່ງແຮງໃຈ, ວັດຖຸ ແລະ ກຳລັງໄປຊ່ວຍຊາວ ແຂວງ ໄຊຍະບູລີ ຄິດໄລ່ເປັນມູນຄ່າຫລາຍຕື້ກີບ. ໃນນັ້ນ, ມີທັງສະບຽງອາ ຫານ, ເຄື່ອງບໍລິໂພກ - ອຸປະໂພກ ແລະ ກຳລັງ, ພາຫະນະຮັບໃຊ້ ໃຫ້ແກ່ການສູ້ຮົບ ປົກປັກຮັກ ສາປະເທດຊາດ.

ສັງລວມແລ້ວ, ຕະຫລອດບັນດາຊຸມປີ ທີ່ຫຍຸ້ງຍາກ ໃນບາດກ້າວເດີນທຳອິດ ຂອງການກໍ່ ສ້າງລະບອບໃໝ່ ຂອງ ສປປ ລາວ. ກໍ່ຄືການ ກໍ່ສ້າງ ນະຄອນຫລວງວຽງຈັນ ຊຶ່ງເປັນນະຄອນ ຫລວງ ຂອງປະເທດຊາດ, ເຖິງວ່າຈະປະເຊີນໜ້າ ກັບຄວາມຫຍຸ້ງຍາກຫລາຍດ້ານ ທີ່ສັດຕູກໍ່ ຂຶ້ນ, ເປັນຕົ້ນແມ່ນ ບັນຫາການກໍ່ຄວາມບໍ່ສະຫງົບ ດ້ານເສດຖະກິດ - ສັງຄົມ ຍັງບໍ່ທັນມີກົນໄກ ຄຸ້ມຄອງອັນແໜ້ນໜາ. ແຕ່ໂດຍພາຍໃຕ້ການ ນຳພາຂອງພັກ ປະຊາຊົນ ປະຕິວັດລາວ. ໂດຍ ສະເພາະ ຄະນະພັກ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ນຳພາ ປະຊາຊົນ ບັນ ດາເຜົ່າ ໃນທົ່ວ ນະຄອນຫລວງວຽງຈັນ ຂອງຕົນ ເຊີດຊູ ຄັນທຸງ ເອກະລາດແຫ່ງຊາດ, ເປັນເຈົ້າ ຕົນເອງ, ເປັນເຈົ້າປະເທດຊາດ; ອອກແຮງຟື້ນຟູປົວແປງ, ກໍ່ສ້າງພື້ນຖານ ປ້ອງກັນຊາດ - ປ້ອງ ກັນຄວາມສະຫງົບ, ພື້ນຖານເສດຖະກິດ ຊີວິດການເປັນຢູ່ ສົມທົບກັບກຳລັງແຮງຂອງຊາດ, ກຳ ລັງຂອງຍຸກສະໄໝ, ບວກກັບລັດທິຮັກຊາດ ອັນແທ້ຈິງ ສາມາດເຮັດໃຫ້ ນະຄອນຫລວງວຽງຈັນ ກາຍເປັນທີ່ຕັ້ງສູນກາງຂອງປະເທດຊາດ, ເປັນບ່ອນອີງ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ພາ ລະກິດປົກປັກຮັກສາ ແລະ ສ້າງສາ ພັດທະນາ ປະເທດຊາດ ຂອງປະຊາຊົນລາວບັນດາເຜົ່າ ໃນ ທົ່ວປະເທດ. ປະກອບສ່ວນເຮັດໃຫ້ຖານະບົດບາດອິດທິພົນຂອງຊາດ ກໍ່ຄື ພັກ - ລັດ ໄດ້ຮັບ ການເຊີດຊູໃນເວທີສາກົນ ນັບມື້ນັບສູງ ເດັ່ນຂຶ້ນເປັນກ້າວໆ.

ມາເຖິງ ວັນທີ 13/3/1986 ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງ ທີ I ໄດ້ໄຂຂຶ້ນຢູ່ໃຈກາງ ນະຄອນຫລວງວຽງຈັນ, ກອງປະຊຸມໃຫຍ່ ຄັ້ງທີ I ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ໄດ້ເປັນບ່ອນອີງ ແລະ ໄຂສັງກາດໃໝ່ ໃຫ້ແກ່ລະບົບການກໍ່ສ້າງ ພື້ນ ຖານ ໂຄງລ່າງເສດຖະກິດ, ການເມືອງ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ວັດທະ ນະທຳ - ສັງຄົມ, ໂດຍພາຍໃຕ້ ການເປັນ ປະທານຂອງ **ທ່ານ ສີສະຫວາດ ແກ້ວບຸນພັນ** ກຳມະ ການກົມການເມືອງ ສູນກາງພັກ, ເລຂາຄະນະພັກ, ປະທານປົກຄອງ ກຳແພງນະຄອນວຽງຈັນ ກອງປະຊຸມ ໄດ້ມີຕົວແທນຈາກຫລາຍພາກສ່ວນ, ຜູ້ຊົງຄຸນວຸດທິ, ສາສະ ໜາ, ແມ່ຍິງ, ຊາວໜຸ່ມ,



ທ່ານ ສີສະຫວາດ ແກ້ວບຸນພັນ
ກຳມະການກົມການເມືອງ
ສູນກາງພັກ, ເລຂາຄະນະພັກ,
ປະທານປົກຄອງກຳແພງ
ນະຄອນວຽງຈັນ.
ປີ 1987 - 1991

ອົງການຈັດຕັ້ງພາກລັດ - ເອກະຊົນ ແລະ ບັນດາພະນັກງານປະຕິວັດອາວຸໂສ ເຂົ້າຮ່ວມຢ່າງຫຼວງຫຼາຍ. ພິເສດກອງປະຊຸມ ໄດ້ເປັນກຽດຢ່າງສູງທີ່ໄດ້ຕ້ອນຮັບ ແລະ ຟັງການໂອ້ລົມຂອງ**ທ່ານ ໄກສອນ ພົມວິຫານ** ເລຂາທິການໃຫຍ່, ປະທານສະພາລັດຖະມົນຕີ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ. ຊຶ່ງໄດ້ເນັ້ນໜັກເຖິງທິດທາງ, ໜ້າທີ່ວຽກງານການດັດສ້າງ ແລະ ກໍ່ສ້າງ ສັງຄົມນິຍົມຢູ່ ສປປ ລາວ ວ່າ: " ລະຫວ່າງໜ້າທີ່ພື້ນຖານ ກັບຈຸດໝາຍສະເພາະໜ້າ ສຳຄັນກ່ອນໝູ່ໝົດ ກໍ່ແມ່ນບໍ່ອາດອະນຸຍາດ ໃຫ້ຫລົງລືມທາດແທ້ ຊົນຊັ້ນຂອງການປະຕິວັດ ແລະ ວັດຖຸປະສົງສຸດທ້າຍຂອງມັນ ເປັນອັນຂາດຈະເປັນໃນເວລາໃດກໍ່ຕາມ " ❶.

ນະຄອນຫລວງວຽງຈັນ ພາຍຫຼັງແຍກຕົວອອກເປັນ 2 ແຂວງ ໃນວັນທີ 25 ເດືອນ 8 ປີ 1981, ອົງຄະນະພັກ ກຳລັງປະກອບອາວຸດ - ປ້ອງກັນຄວາມສະຫງົບຊາວ ນະຄອນຫລວງວຽງຈັນ ກໍ່ໄດ້ສຸມໃສ່ວຽກງານກໍ່ສ້າງ ແລະ ດັດສ້າງສັງຄົມນິຍົມ ຢູ່ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ໂດຍກົງຮອບດ້ານ. ໃນກອງປະຊຸມໃຫຍ່ຄັ້ງນີ້, ໄດ້ຕີລາຄາຜົນສຳເລັດແຫ່ງການປົກປັກຮັກສາ ແລະ ດັດສ້າງສັງຄົມ ໃນແຕ່ລະຂົງເຂດວຽກງານ ຕະຫຼອດໄລຍະ10 ປີ (1976 - 1986) ຜ່ານມາ ພ້ອມທັງໄດ້ໄຈ້ ແຍກສະພາບການຂອງໂລກ ແລະ ພາກພື້ນ ຢ່າງເລິກຊຶ້ງຄືດັ່ງນີ້:

1. ຂົງເຂດວຽກງານ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

ເຖິງວ່າພວກຈັກກະພັດ ແລະ ອິດທິກຳລັງປະຕິການຂາຍຊາດ ບໍ່ໄດ້ລົດລະຄວາມພະຍາຍາມມ້າງເພທຳລາຍ ລະບອບໃໝ່ຂອງພວກເຮົາ, ໂດຍສະເພາະຢ່າງຍິ່ງ ສຸມໃສ່ກໍ່ຄວາມບໍ່ສະຫງົບຢູ່ລຽບຕາມຊາຍແດນ ທິດຕາເວັນຕົກ, ເຂດໃຈກາງ ນະຄອນຫລວງວຽງຈັນ ດ້ວຍຫຼາຍຮູບຫຼາຍສີ ນັບທັງການນຳໃຊ້ກຳລັງທະຫານ ລ່ວງລ້ຳເກາะຜິດ, ຂົ່ມຂູ່ບຸກຢຶດດິນແດນ, ວາງແຜນກໍ່ການຈາລະຈົນ, ທຳລາຍອົງການນຳ, ມ້າງຮາກຖານການຜະລິດ, ເສດຖະກິດ, ວັດທະນະທຳ - ສັງຄົມ, ໂຄສະນາ ປັ່ນປ່ວນທາງດ້ານການເມືອງ, ແບ່ງແຍກຄວາມສາມັກຄີພາຍໃນ ແລະ ສາກົນ ເພື່ອເຮັດໃຫ້ພວກເຮົາເສື່ອມເສຍບົດບາດ, ອ່ອນເພຍກ້າວໄປເຖິງ ໂຄ່ນລົ້ມລະບອບໃໝ່ ທີ່ຍັງອ່ອນນ້ອຍໃຫ້ຕາຍຄາອູ່, ແຕ່ຍ້ອນຄວາມສາມັກຄີ ຮັກເຊື້ອແພງຊາດ ທີ່ເປັນມູນເຊື້ອຂອງກຳລັງປະກອບອາວຸດ ແລະ ປະຊາຊົນ ຊາວນະຄອນຫລວງວຽງຈັນ ພາຍໃຕ້ການນຳພາຂອງພັກ

---

1. ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ1, ບາງບົດຮຽນຕົ້ນຕໍ, ໜ້າ 310.





ເຄື່ອນທັບສູ່ສະໜາມຝຶກແອບ



ກຳລັງໂດດຈ້ອງ ເພດຍິງ ກອງທັບປະຊາຊົນລາວ ປີ 1999

ໂດຍກົງແມ່ນ ຄະນະບໍລິຫານງານພັກ ແລະ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ຍາມໃດກໍ່ເຊີດຊູສະຕິຊາດ, ເອກະລາດເປັນເຈົ້າຕົນເອງ ຍົກສູງສະຕິລະວັງຕົວປະຕິວັດ, ເສີມຂະຫຍາຍສິດເປັນເຈົ້າ ເອົາໃຈໃສ່ປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ທັບມ້າງກົນອຸບາຍ ອັນມືດມົນຂອງສັດຕູ, ກວາດລ້າງເລີກຮື້ກຳລັງໃຕ້ດິນ, ນັກສືບສອດແນມ ທີ່ລີ້ຊ່ອນຢູ່ຮາກຖານໃນຕົວເມືອງ, ໂຮງຈັກ, ໂຮງງານ, ໝູ່ບ້ານໃນຂອບເຂດບໍລິເວນ ນະຄອນຫລວງວຽງຈັນ ໃຫ້ໝົດສິ້ນໄປເທື່ອລະກ້າວ ສາມາດເຮັດໃຫ້ ນະຄອນຫລວງວຽງຈັນ ມີຄວາມໝັ້ນຄົງ, ສະຫງົບ - ປອດໄພ ແລະ ເປັນລະບຽບຮຽບຮ້ອຍທາງດ້ານສັງຄົມຢ່າງໜັກແໜ້ນ, ສະຕິຊາດຂອງປະຊາຊົນບັນດາເຜົ່າ ກໍ່ໄດ້ຮັບການຍົກສູງຂຶ້ນເປັນກ້າວໆ. ໄປພ້ອມກັບການເອົາໃຈໃສ່ປົກປັກຮັກສາ ໝາກຜົນຂອງການປະຕິວັດແລ້ວ, ຄະນະພັກອຳນາດການປົກຄອງ ຍັງໄດ້ເອົາໃຈໃສ່ຊີ້ນຳປັບປຸງກຳລັງປະກອບອາວຸດ ຢູ່ທ້ອງຖິ່ນຂອງຕົນ ນັບແຕ່ຂັ້ນແຂວງລົງຫາແຕ່ລະເມືອງ ໃຫ້ເຂັ້ມແຂງ ໂດຍສະເພາະແມ່ນ ເລັ່ງໃສ່ບັນດາຕົວເມືອງ ທີ່ຢູ່ລຽບຕາມຊາຍແດນລາວ - ໄທ ສອງຝັ່ງແມ່ນ້ຳຂອງ ແລະ ສ່ວນໜຶ່ງ ຢູ່ເຂດພູດອຍ ຕາເວັນ ອອກ ແລະ ຕາເວັນອອກສ່ຽງໃຕ້ຂອງ ນະຄອນຫລວງວຽງຈັນ. ໄປຄຽງຄູ່ກັນນັ້ນອຳນາດການປົກຄອງໃໝ່ ນະຄອນຫລວງວຽງຈັນ ຍັງໄດ້ເອົາໃຈໃສ່ສຶກສາອົບຮົມ ແລະ ດັດສ້າງຜູ້ທີ່ຖືກເຄາະຮ້າຍຈາກໄພສັງຄົມເກົ່າ ເຮັດໃຫ້ເຂົາເຈົ້າຄ່ອຍໆ ກາຍເປັນພົນລະເມືອງດີຂອງຊາດ. ປີ 1976 ລັດຖະບານ ສປປ ລາວ ໄດ້ຈັດຕັ້ງເອົານາຍ ແລະ ພົນທະຫານ ຝ່າຍວຽງຈັນເກົ່າ ໄປສຳມະນາຢູ່ແຂວງ ຫົວພັນ ລວມມີຊັ້ນນາຍພົນ 132 ຄົນ; ນາຍພັນ 1032 ຄົນ.

ເວົ້າລວມແລ້ວ ໃນບັນດາຊຸມປີທຳອິດຂອງການກໍ່ສ້າງ ນະຄອນຫລວງວຽງຈັນ ແມ່ນໄດ້ຖືເອົາວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ເປັນບັນຫາສຳຄັນ ນອນຢູ່ໃນແຖວໜ້າຂອງວຽກງານກໍ່ສ້າງ ແລະ ດັດສ້າງສັງຄົມ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ແຕ່ຂັ້ນຮາກຖານຂຶ້ນມາ ແລະ ມີຄຸນນະພາບດີ ພົ້ນເດັ່ນກວ່າໝູ່ແມ່ນ ເຂດລ້ອງສ້ຽ - ລ້ອງຕອນ (ຊຶ່ງເປັນເຂດທີ່ໝັ້ນຂອງການປະຕິວັດເກົ່າ ແຂວງ ວຽງຈັນ ແຕ່ປີ 1945 -1975).

2. ຂົງເຂດວຽກງານ ກໍ່ສ້າງ ເສດຖະກິດ.

ໃນໄລຍະ 10 ປີ ຜ່ານມາ (1975 - 1985) ການດັດສ້າງ ເສດຖະກິດ - ສັງຄົມ ຂອງ ນະຄອນວຽງຈັນ ໄດ້ຂະຫຍາຍຕົວໄປຕາມທິດທາງ ແລະ ໜ້າທີ່ລວມຂອງມະຕິ ກອງປະຊຸມໃຫຍ່ ຄັ້ງທີ II, III ຂອງພັກ ປະຊາຊົນ ປະຕິວັດລາວ ແລະ ມະຕິຕ່າງໆ ຂອງຄະນະພັກ ນະຄອນຫລວງວຽງຈັນ ໂດຍມີຜົນສຳເລັດຢ່າງກວ້າງຂວາງ ໃນແຕ່ລະດ້ານຂອງຂະແໜງການເສດຖະກິດ - ສັງຄົມ. ເຮັດໃຫ້ພື້ນຖານວັດຖຸ - ເຕັກນິກ, ເສດຖະກິດ ແລະ ວັດທະນະທຳ - ສັງຄົມ

ໄດ້ຮັບການຂະຫຍາຍຕົວໃນຈັງຫວະໄວ ແລະ ມີຄວາມໜັກແໜ້ນດີສົມຄວນ. ຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ, ປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງປ່ຽນແປງ ແລະ ເບິ່ງແຍງດີຂຶ້ນເປັນກ້າວໆ. ລາຍໄດ້ສ່ວນໃຫຍ່ຂອງ ນະຄອນຫລວງວຽງຈັນ ແມ່ນມາຈາກການຜະລິດກະສິກຳ ແລະ ອຸດສະຫະກຳ ເປັນຕົ້ນຕໍ ລະອຽດຄື ດັ່ງນີ້:



ຟາມລ້ຽງໄກ່ ສະຫະກອນ ດ່ານຊ້າງ ເມືອງ ໄຊທານີ ນະຄອນຫລວງວຽງຈັນ

- ດ້ານກະສິກຳ, ຊົນລະປະທານ ແລະ ການລ້ຽງສັດ.

ນະຄອນຫລວງວຽງຈັນ ເອົາໃຈໃສ່ ປັບປຸງ ໂຄງປະກອບການຜະລິດ ກະສິກຳ ເປັນຕົ້ນຕໍ ຕາມທິດທາງໜ້າທີ່ ຂອງພັກວາງອອກທີ່ວ່າ: ເອົາກະສິກຳ - ປ່າໄມ້ ເປັນພື້ນຖານ ໃຫ້ແກ່ການຂະຫຍາຍອຸດສະຫະກຳ, ທັນເອົາການຜະລິດນ້ອຍ ກະແຈກກະຈາຍ ເຂົ້າສູ່ການຜະລິດແບບລວມໝູ່ສັງຄົມນິຍົມ ເປົ້າໝາຍຕົ້ນຕໍ ແມ່ນສູ້ຊົນກຸ້ມຕົນເອງ ທາງດ້ານສະບຽງອາຫານ, ມີສ່ວນແຮໄວ້ ແລະ ສະໜອງໃຫ້ສູນກາງ ຈຳນວນໜຶ່ງ.

ມາຮອດປີ 1986 ເນື້ອທີ່ນາ ມີທັງໝົດ 36.200 ເຮັກຕາ, ການຜະລິດເຂົ້າທັງໝົດ ເພີ່ມຂຶ້ນ ສະເລ່ຍແຕ່ລະປີ 3,7% ໃນຊຸມປີ 1978 -1980 ແລະ 3,5% ໃນຊຸມປີ 1981-1986. ຄົດສະເລ່ຍໃສ່ ພົນລະເມືອງ ຢູ່ພາຍໃນ ນະຄອນຫລວງວຽງຈັນ, ສຳຫລວດ ໃນວັນທີ 1.3.1986 ໄດ້ 298 ກິໂລ ຕໍ່ຄົນ ຕໍ່ປີ. ການປູກພືດສຳຮອງສາລີ, ຖົ່ວຂຽວ, ຖົ່ວດິນ, ອ້ອຍ ໃນແຕ່ລະປີ ກໍ່ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ. ນອກນັ້ນ, ຍັງມີບັນດາ ປະເພດ ຜັກ ແລະ ໝາກໄມ້ ອື່ນໆ ອີກ.



ສວນຜັກ ຂອງປະຊາຊົນ ຊາວນະຄອນຫຼວງວຽງຈັນ

ດ້ານຊົນລະປະທານ ໄດ້ສຸມໃສ່ຂຸດຄົ້ນໝົດຄວາມສາມາດ ກຳລັງແຮງທີ່ບົ່ມຊ້ອນຂອງ ຕົນເຂົ້າໃນການກໍ່ສ້າງຊົນລະປະທານ ຢ່າງເປັນຂະບວນ ນັບທັງແຮງງານຄົນ ແລະ ກົນຈັກ ສຸມ ທຶນຮອນ ນັບທັງທຶນພາຍໃນ ແລະ ທຶນ ຈາກອົງການຈັດຕັ້ງສາກົນ ແລະ ຖືເອົາການກໍ່ສ້າງຂະ ໜາດນ້ອຍ ແລະ ຂະໜາດກາງ ມີລັກສະນະຈຸດສຸມ ແລະ ນຳໃຊ້ຢ່າງມີປະສິດທິຜົນ.

ມາເຖິງປີ 1986 ນະຄອນຫລວງວຽງຈັນ ມີລະບົບ ຊົນລະປະທານ ຂະໜາດນ້ອຍ, ກາງ ແລະ ສະຖານີ ສູບນ້ຳ 51 ແຫ່ງ, ສາມາດສະໜອງ ເນື້ອທີ່ນາ ໄດ້ຫລາຍກວ່າ 10.000 ເຮັກຕາ ຢູ່ເຂດ ເມືອງ ນາຊາຍທອງ, ເມືອງ ປາກງື່ມ, ໄຊທານີ... ໃນນັ້ນ, ການເຮັດ ນາແຊງ ໄດ້ມີການ ຂະຫຍາຍຕົວຂຶ້ນເລື້ອຍໆ ກ່ອນປະເທດຊາດ ບໍ່ທັນໄດ້ຮັບການປົດປ່ອຍ ການເຮັດນາແຊງຢູ່ນະ ຄອນຫລວງວຽງຈັນ ເກືອບວ່າບໍ່ມີ. ປະຊາຊົນສ່ວນຫລາຍເຮັດນາ ແມ່ນເຮັດຕາມລະດູການເທົ່າ ນັ້ນ. ໃນລະບອບໃໝ່ນີ້, ພາຍໃຕ້ການນຳພາ ອັນສະຫລາດສ່ອງໃສຂອງພັກ, ອຳນາດການປົກ ຄອງ ປະຊາທິປະໄຕ ປະຊາຊົນ ການເຮັດກະເສດສຸມຢູ່ນະຄອນຫລວງວຽງຈັນ ໄດ້ກາຍເປັນຕົວ ແບບຂະຫຍາຍຢ່າງກວ້າງຂວາງ ແລະ ເພີ່ມສະມັດຕະພາບການຜະລິດເຂົ້ານາປີ ຈາກ 1,5 ຂຶ້ນ

ເປັນ 2,4 ໂຕນຕໍ່ເຮັກຕາ, ນາແຊງຈາກ 1,6 ຂຶ້ນເປັນ 2,7 ໂຕນຕໍ່ເຮັກຕາ ຊຶ່ງໄດ້ເຮັດໃຫ້ການຜະລິດນາແຊງ ຢູ່ນະຄອນຫລວງວຽງຈັນ ກວມເອົາ 40% ຂອງເນື້ອທີ່ ນາແຊງ ໃນທົ່ວປະເທດ. ປີ 1985, ປະລິມານການຜະລິດເຂົ້າ ໄດ້ເພີ່ມຂຶ້ນ, ສະເລ່ຍໃສ່ຫົວຄົນຜູ້ໜຶ່ງ ໄດ້ 360 ກິໂລກະລາມ. ໄປຄຽງຄູ່ກັບການປູກເຂົ້າກິນ, ຢູ່ແຕ່ລະຮາກຖານການຜະລິດ ປະຊາຊົນ ຍັງໄດ້ເອົາໃຈໃສ່ການປູກພືດຜັກປະເພດທາດແປ້ງ, ຜັກສົດເປັນຈຳນວນຫລວງຫລາຍ, ປູກບັນດາຕົ້ນໄມ້ອຸດສະຫະກຳໄລຍະສັ້ນ, ໄລຍະຍາວ... ປີ 1985, ເນື້ອທີ່ປູກຢາສູບ ເພີ່ມຂຶ້ນ 180 %, ສາລີ ເພີ່ມຂຶ້ນ 9,3%, ອ້ອຍ 3,8%, ຖົ່ວຂຽວ 4 ເທົ່າທຽບໃສ່ປີ 1976.

ການລ້ຽງສັດ ໄດ້ມີການຂະຫຍາຍຕົວຂຶ້ນເລື້ອຍໆ ປີ 1986 ມີຈຳນວນງົວ, ຄວາຍ ແລະ ໝູ ເຖິງ 149.000 ກວ່າໂຕ ທຽບໃສ່ປີ 1976 ເພີ່ມຂຶ້ນ 1,4%, ສັດປີກ 5,6%; ໃນເວລາດຽວກັນນັ້ນ, ການຫັນເປັນສະຫະກອນກະເສດ ໄດ້ມີຄວາມກ້າວໜ້າ, ປະຊາຊົນຊັ້ນ ຄົນຕ່າງໆ ໄດ້ຫ້າວຫັນປະກອບສ່ວນ ເຂົ້າສູ່ການຜະລິດຢ່າງຕັ້ງໜ້າ, ມາຮອດປີ 1986 ທົ່ວ ນະຄອນຫລວງວຽງຈັນ ໄດ້ມີໜ່ວຍ ສະຫະກອນກະເສດ 187 ໜ່ວຍ, ກວມເອົາ 24% ຂອງຄອບຄົວຊາວນາທັງໝົດ. ໃນນັ້ນ, ພື້ນເດັ່ນກວ່າໝູ່ ສະຫະກອນ ດອນດູ່, ເກົ້າລ້ຽວ, ດົງໂພສີ, ຕາແສງໂພນທອງ, ບ້ານ ຝາຍ, ທ່າສີ້ມມໍ, ທ່າດີນແດງ. ນອກຈາກນັ້ນ, ຢູ່ແຕ່ລະທ້ອງຖິ່ນ ຍັງໄດ້ຈັດຕັ້ງການທຳມາຫາກິນແບບລວມໝູ່, ດຳເນີນການຜະລິດທຸລະກິດຫລາຍຂັ້ນ ຕອບສະໜອງໄດ້ທາງດ້ານການແກ້ໄຂຊີວິດການເປັນຢູ່ ເຮັດໃຫ້ທົ່ວ ນະຄອນຫລວງ ມີຊີວິດການເປັນຢູ່ດີຂຶ້ນເລື້ອຍໆ.

- ວຽກງານດ້ານ ອຸດສະຫະກຳ, ຫັດຖະກຳ ແລະ ປ່າໄມ້.

ອຸດສະຫະກຳ .

ນະຄອນຫລວງວຽງຈັນ ໄດ້ຮັບການກໍ່ສ້າງ ແລະ ພັດທະນາ ໃຫ້ມີການຂະຫຍາຍຕົວຕາມທິດທາງ ຮັບໃຊ້ການຜະລິດກະສິກຳ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ທົ່ວນະຄອນຫລວງ ໄດ້ມີພື້ນຖານອຸດສະຫະກຳ 18 ແຫ່ງ. ມາຮອດປີ 1984, ຍອດມູນຄ່າຜະລິດຕະພັນອຸດສະຫະກຳ ເພີ່ມຂຶ້ນເຖິງ 56,8% ທຽບໃສ່ ປີ 1976, ເດັ່ນກວ່າໝູ່ ແມ່ນໂຮງງານຜະລິດເຄື່ອງມືການກະເສດ, ຜະລິດສິນຄ້າໃຊ້ສອຍ ແລະ ຂາອອກ ຊຶ່ງໄດ້ກາຍເປັນເງື່ອນໄຂສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ຂຶ້ນເທື່ອລະກ້າວ. ການດຳເນີນການຜະລິດຂອງ ປະຊາຊົນ ໄດ້ເປັນປົກກະຕິມີປະສິດທິຜົນ, ບັນດາຫົວໜ່ວຍວິສາຫະກິດນັບທັງລວມໝູ່ຂອງລັດ, ເອກະຊົນ ໄດ້ຫັນໄປສູ່ກົນໄກໃໝ່ ທີ່ມີການໄລ່ລ່ຽງເສດຖະກິດ ແລະ ທຸລະກິດສັງຄົມນິຍົມ ເພື່ອສ້າງພື້ນຖານອຸດສະຫະກຳເບົາ ກ້າວສູ່ການ ຜະລິດຂະໜາດໃຫຍ່ ໃນອະນາຄົດ.



ໂຮງງານ ຕັດຫຍິບ ແຫ່ງໜຶ່ງ ຢູ່ໃນ ນະຄອນຫລວງວຽງຈັນ

*** ວຽກງານ ປ່າໄມ້:**

ໄປພ້ອມກັບ ວຽກງານຂະຫຍາຍ ແລະ ຟື້ນຟູ ເນື້ອທີ່ປູກຝັງ ຢູ່ທົ່ງພຽງຂອງ ນະຄອນຫລວງ ວຽງຈັນ ນັບມື້ເພີ່ມຂຶ້ນ ເຮັດໃຫ້ເນື້ອທີ່ ເຮັດໄຮ່ ຫລຸດລົງ, ຄະນະພັກ - ອຳນາດການປົກຄອງ ນະ ຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຊີ້ນຳ ໃນການຈັດຕັ້ງ ບູລະນະຮັກສາປ່າໄມ້ ແລະ ປູກຕົ້ນໄມ້, ການຂຸດຄົ້ນໄມ້ ກໍ່ຄ່ອຍໆ ເຂົ້າສູ່ລະບຽບ, ໃນປີ 1985 ທົ່ວ ນະຄອນຫລວງ ຂຸດຄົ້ນໄມ້ ໄດ້ 15.700 ແມັດກ້ອນ.

ຂົງເຂດ ການແຈກຢາຍການຈຳລະຈອນ, ຢູ່ນະຄອນຫລວງວຽງຈັນ ໄດ້ຂະຫຍາຍຕາໜ່າງ ການຄ້າຂອງລັດ, ຈັດຕັ້ງສະຫະກອນຊື້ - ຂາຍ ໃຫ້ລົງເລິກເຖິງຮາກຖານປະຊາຊົນຢູ່ອ້ອມແອ້ມ ຕົວເມືອງ ແລະ ຊົນນະບົດ, ພຽງໄລຍະ 10 ປີ ທົ່ວນະຄອນຫລວງວຽງຈັນ ໄດ້ມີຮ້ານຄ້າຂອງລັດ ເຖິງ 35 ແຫ່ງ, ສະຫະກອນ ຊື້ - ຂາຍ 151 ແຫ່ງ, ລັດໄດ້ປະຕິບັດການຜະລິດ ດ້ວຍຮູບການ 2 ສົ້ນ ກັບຮາກຖານການຜະລິດ ອັນໄດ້ສ້າງເງື່ອນໄຂປັດໄຈໃໝ່ ທີ່ມີການປຸກລະດົມຊວນເຊື່ອ ເອົາບັນດາກຸ່ມພໍ່ຄ້າຊາວຂາຍ ເຂົ້າຫຸ້ນສ່ວນກັບລັດ, ຕິດພັນກັບຜົນປະໂຫຍດ ລະຫວ່າງລັດ ກັບ ປະຊາຊົນ, ຜູກຂາດທາງດ້ານຂາອອກ - ຂາເຂົ້າ ຂອງຜະລິດຕະພັນ, ອັນໄດ້ ສ້າງໃຫ້ເປັນການ ປະກອບສ່ວນສຳຄັນ ເຂົ້າໃນການເຮັດໃຫ້ຕະຫລາດ ແລະ ລາຄາສິນຄ້າ ມີຄວາມສະຫງົບ ເທື່ອ

ລະກ້າວ, ລັດສາມາດກຳສິນຄ້ານັບມື້ນັບຫລາຍຂຶ້ນ, ເດັ່ນທີ່ສຸດແມ່ນສະຫະກອນຊື້ - ຂາຍ ບ້ານ ດ່ານຊ້າງ, ເມືອງ ໄຊທານີ. ປີ 1985 ມີຍອດມູນຄ່າສິນຄ້າຂາຍຍ່ອຍຂອງ ບໍລິສັດ ການຄ້າ ນະ ຄອນຫລວງ ເພີ່ມຂຶ້ນ 5 ເທົ່າ ທຽບໃສ່ປີ 1980. ໃນດ້ານອື່ນແມ່ນໄດ້ເອົາໃຈໃສ່ຂະຫຍາຍຕາ ໜ່າງບໍລິການ, ການກິນດື່ມ, ການຕັດຫຍິບ, ທ່ອງທ່ຽວ ແລະ ອື່ນໆ.

*** ວຽກງານ ຫັດຖະກຳ:**

ໄດ້ຮັບການຟື້ນຟູ ແລະ ເສີມຂະຫຍາຍ ຢູ່ໃນໝູ່ຊຸມຊົນ ນະຄອນຫລວງ ຢ່າງກ້ວາງຂວາງ ເປັນຕົ້ນແມ່ນ ຫັດຖະກຳລວມໝູ່, ຫັດຖະກຳ ແຕ່ລະຄອບຄົວ, ສາມາດສ້າງຜະລິດ ຕະພັນໄດ້ ຫລາຍຊະນິດ, ຫລາຍປະເພດ ເພື່ອສະໜອງກັບຄວາມຕ້ອງການ ໃຫ້ແກ່ສັງຄົມ ຢູ່ພາຍໃນປະ ເທດ ແລະ ເປັນສິນຄ້າຂາອອກ ໃນດ້ານການຫັດຖະກຳ ຖັກແສ່ວ, ຈັກສານ, ຄ້ວດລວດລາຍ. ອີງຕາມຕົວເລກສະຫລຸບ ປີ1985, ນະຄອນຫລວງວຽງຈັນ ໄດ້ມີການຈັດຕັ້ງຜູກພັນການຜະລິດ ກວ່າ 700 ຄອບຄົວ, ເດັ່ນທີ່ສຸດກໍ່ແມ່ນໜ່ວຍຫັດຖະກຳຖັກແສ່ວໂພນຕ້ອງ ຊຶ່ງແມ່ນສະຫະກອນ ທີ່ມີຮູບແບບການຈັດຕັ້ງ ຜະລິດລວມໝູ່ທີ່ທັນສະໄໝ, ສະເລ່ຍລວມຍອດຜະລິດຕະພັນ ໃນປີ 1985 ມູນຄ່າການຜະລິດ ເພີ່ມຂຶ້ນ ຈາກປີ 1980 ມີເຖິງ 13%.

ປະຕິບັດຕາມ ແຜນນະໂຍບາຍ ແບ່ງຂັ້ນ ຄຸ້ມຄອງ ຂອງສູນກາງ, ການນຳ, ອຳນາດການ ປົກຄອງໃໝ່ຂອງ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ສູ້ຊົນ ປະຕິບັດການສ້າງແຫລ່ງລາຍຮັບ ຢູ່ທ້ອງຖິ່ນຈົນສາມາດດຸ່ນດ່ຽງງົບປະມານ ຂອງທ້ອງຖິ່ນໄດ້ດ້ວຍຕົນເອງ ແລະ ສ້າງພັນທະຕໍ່ສູນ ກາງໄດ້ລົ້ນຕົວເລກຄາດໝາຍ; ການປະຕິບັດລະບອບເງິນເດືອນໃຫ້ແກ່ພະນັກງານ, ພາລະ ກອນ (ບໍລິຫານ) ສາມາດສະໜອງໄດ້ຕາມທິດນຳຂອງສູນກາງ; ດ້ານທະນາຄານກໍ່ໄດ້ຂະ ຫຍາຍຕາໜ່າງທະນາຄານໄປທົ່ວທຸກຕົວເມືອງ, ການບໍລິການ, ຂະຫຍາຍສະຫະກອນ ສິນເຊື່ອ ຂອງທະນາຄານ ມີຄວາມກ້າວໜ້າ, ຂະບວນການ ຝາກເງິນປະຢັດ ຂອງປະຊາຊົນ ບັນດາເຜົ່າ ແລະ ລັດຖະກອນ ກໍ່ຄ່ອຍໆ ດີຂຶ້ນ ຊຶ່ງມັນໄດ້ສ້າງໃຫ້ ສະຖາບັນ ການເງິນ ໝູນວຽນໄວຂຶ້ນ, ປະ ກອບສ່ວນຮັກສາຄ່າຂອງເງິນກີບ ໄວ້ໄດ້ຢ່າງເໝາະສົມ.

ປັດໄຈໃໝ່ອັນໜຶ່ງ ຂອງນະຄອນຫລວງວຽງຈັນ, ພາຍຫລັງທີ່ໄດ້ແຍກອອກຈາກ ແຂວງ ວຽງຈັນແລ້ວ ກໍ່ສືບຕໍ່ປະຕິບັດການ ພົວພັນ ການຄ້າ ກັບບັນດາແຂວງ ຢູ່ພາຍໃນປະເທດ, ຕ່າງ ປະເທດ ໄດ້ຮ່ວມສຳພັນກັບ ນະຄອນຫລວງ ຮ່າໂນ້ຍ, ນະຄອນ ໂຮ່ຈີ້ມິນ (ສສ ຫວຽດນາມ) ອັນເປັນການສ້າງທ່າແຮງ ໃຫ້ແກ່ການພົວພັນ ການຄ້າ ພາຍໃນກັບຕ່າງປະເທດ ຫລາຍຂຶ້ນ ກວ່າເກົ່າ.


*** ວຽກງານ ຄົມມະນາຄົມ ຂົນສົ່ງ:**

ຕະຫລອດ 10 ປີ (1976 -1986) ຂອງໄລຍະຕົ້ນ ແຫ່ງການ ກໍ່ສ້າງ ນະຄອນຫລວງ ວຽງຈັນ, ໃຕ້ການນຳພາຂອງຄະນະພັກ, ອຳນາດການປົກຄອງໃໝ່, ພວກເຮົາໄດ້ເອົາໃຈໃສ່ຕໍ່ ການກໍ່ສ້າງ ແລະ ຂະຫຍາຍເສັ້ນທາງ ຄົມມະນາຄົມ ຂົນສົ່ງ ທາງບົກ ແລະ ທາງນ້ຳ; ໃຈກາງ ນະຄອນຫລວງວຽງຈັນ ມີເສັ້ນທາງ ເລກ 13 ຕັດຜ່ານ. ຊຶ່ງເປັນເສັ້ນທາງ ສາຍຍຸດທະສາດຂອງ ຊາດ ຜ່ານແຕ່ເໜືອລົງໃຕ້ ຂອງປະເທດຊາດ. ນອກຈາກນັ້ນ, ກໍ່ມີບັນດາເສັ້ນທາງ ສາຍສຳຄັນ ຕັດໄຂ່ວກັນໄປມາ ແຕ່ລະຕົວເມືອງ ພາຍໃນ ນະຄອນຫລວງ; ນອກຈາກເສັ້ນທາງບົກແລ້ວ, ຍັງມີສາຍນ້ຳຂອງ ໄຫລຜ່ານ ແລະ ກໍ່ເປັນເສັ້ນທາງ ຂົນສົ່ງ ສຳຄັນສາຍໜຶ່ງ ຂອງປະເທດລາວ ເວົ້າລວມ, ເວົ້າສະເພາະ ແມ່ນ ນະຄອນຫລວງວຽງຈັນ.

ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍ, ລັດຖະບານ ສປປ ລາວ ໄດ້ສືບຕໍ່ສ້າງ ນະ ຄອນຫລວງວຽງຈັນ ກາຍເປັນສູນກາງຂອງປະເທດຊາດ; ນະຄອນຫລວງວຽງຈັນ ກໍ່ໄດ້ກ້າວເຂົ້າ ສູ່ການກໍ່ສ້າງຢ່າງຮອບດ້ານ. ຕະຫລອດ 10 ປີ ຕົ້ນ ເສັ້ນທາງທົ່ວ ນະຄອນຫລວງ ໄດ້ຮັບການ ຟື້ນຟູ ແລະ ປູຢາງ ໄດ້ 39 ກິໂລແມັດ, ສ້າງເສັ້ນທາງອອກສູ່ຊົນນະບົດ ໄດ້ 263,3 ກິໂລແມັດ, ປັບປຸງລະບົບ ຮ່ອງລະບາຍນ້ຳເສຍຢູ່ພາຍໃນຕົວເມືອງຄື ເຖິງ 7000 ກວ່າແມັດ; ລະບົບການ ຂົນສົ່ງ ໄດ້ມີການຈັດຕັ້ງບັນດາ ບໍລິສັດ ຂົນສົ່ງ ທາງບົກ, ທາງນ້ຳ, ມີບໍລິສັດລົດເມ, ລົດນ້ອຍ ເພື່ອຮັບປະກັນ ການຈາລະຈອນສິນຄ້າ ແລະ ການໄປມາຂອງ ປະຊາຊົນ ຊັ້ນຄົນຕ່າງໆ. ປີ 1985, ບໍລິມາດສິນຄ້າຈາລະຈອນ ເພີ່ມຂຶ້ນເຖິງ 17 ເທົ່າ, ການຂົນສົ່ງໂດຍສານ ເພີ່ມຂຶ້ນ ເກືອບ 2 ເທົ່າ ທຽບກັບປີ 1980.❶

---


1. ນ້ຳຂອງ: ໃນສະໄໝຝະລັ່ງປົກຄອງລາວ, ພວກເຂົາກໍ່ໄດ້ໃຊ້ເປັນເສັ້ນທາງເດີນສຳຫລວດປະເທດລາວ ແລະ ອິນດູຈີນ, ໃຊ້ເປັນເສັ້ນທາງລຳລຽງອາວຸດ, ສິນຄ້າ ຂາອອກ - ຂາເຂົ້າ ທີ່ສຳຄັນຂອງພວກເຂົາ, ຕໍ່ມາສະໄໝອາເມລິກາ ພວກເຂົາກໍ່ໄດ້ຖືສຳຄັນໃນການນຳໃຊ້ເສັ້ນທາງຜ່ານນ້ຳຂອງ ເຊັ່ນດຽວກັນ



ຂົວຂ້າມ ນ້ຳງື່ມ ຢູ່ທ່າງ່ອນ ສ້າງຫລັງ ປະເທດຊາດ ໄດ້ສະຖາປະນາເປັນ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ



ສາຍການບິນລາວ ຢູ່ນະຄອນຫລວງວຽງຈັນ



ເສັ້ນທາງການບິນ ຈາກນະຄອນຫລວງວຽງຈັນ ໄປພາຍໃນ ແລະ ຕ່າງປະເທດ






ການຂົນສົ່ງທາງນ້ຳ ຢູ່ນະຄອນຫລວງວຽງຈັນ

3. ຂົງເຂດ ວັດທະນະທຳ - ສັງຄົມ:

ການກໍ່ສ້າງ ແລະ ຂະຫຍາຍພື້ນຖານ ວັດທະນະທຳໃໝ່ ທີ່ມີລັກສະນະຊາດ ຢູ່ນະຄອນຫລວງວຽງຈັນ ແມ່ນໄດ້ຖືກຍົກຂຶ້ນເປັນບັນຫາສຳຄັນຍິ່ງ, ພາຍໃຕ້ການຊີ້ນຳ - ນຳພາຂອງລະບອບໃໝ່, ການກໍ່ສ້າງ ວັດທະນະທຳ ທີ່ມີເນື້ອໃນສັງຄົມນິຍົມນັ້ນ, ໄດ້ມີການປຸກລຸກຂະບວນການຕໍ່ສູ້ລົບລ້າງບັນດາຮ່ອງຮອຍສັງຄົມ - ວັດທະນະທຳ ອັນເຊື່ອມຊາມຂອງລັດທິລ່າເມືອງຂຶ້ນເກົ່າ ແລະ ໃໝ່ປະໄວ້. ເຮັດໃຫ້ສະພາບດ້ານສັງຄົມຢູ່ ນະຄອນຫລວງວຽງຈັນ ໄດ້ຄ່ອຍໆ ດີຂຶ້ນ, ການເຄື່ອນໄຫວທາງດ້ານວັດທະນະທຳອັນສົດໃສ ໄດ້ມີຫລາຍຮູບຫລາຍສີ, ມີຂະແໜງຮູບເງົາ, ກອງສິລະປະກອນ, ໜ່ວຍລຳເລື່ອງອາຊີບ, ສະໝັກຫລິ້ນ, ມີໜ່ວຍສິລະປະວັນນະຄະດີສະໝັກຫລິ້ນນັບຫລາຍໜ່ວຍ ເຄື່ອນໄຫວຮັບໃຊ້ມວນຊົນ ຢູ່ໃນງານຊຸມນຸມສຳຄັນທາງປະຫວັດສາດ, ສາສະໜາຕ່າງໆ.

ດ້ານການສຶກສາ ໃນທ້າຍ ປີ 1978 ທົ່ວນະຄອນຫລວງວຽງຈັນ ໄດ້ຮັບການປະກາດ ລົບລ້າງ ຄວາມບໍ່ຮູ້ໜັງສື 100%, ຊຶ່ງໄດ້ກາຍເປັນຜົນງານທາງດ້ານ ປະຫວັດສາດ ຂອງຊາວ ນະຄອນຫລວງວຽງຈັນ. ລະບົບການ ສຶກສາ ໄດ້ຂະຫຍາຍຕົວອອກ ຢ່າງກວ້າງຂວາງ ລວມທັງ ຊັ້ນອະນຸບານ, ສາມັນສຶກສາ, ອາຊີວະສຶກສາ... ຮັບປະກັນໃຫ້ລູກຫລານ ປະຊາຊົນ ບັນດາເຜົ່າໄດ້ເຂົ້າຮຽນຕາມແນວທາງການສຶກສາໃໝ່ສັງຄົມນິຍົມ ໄປພ້ອມໆ ກັບວຽກງານຂະຫຍາຍດ້ານວັດທະນະທຳ, ການສຶກສາຢູ່ນະຄອນຫລວງວຽງຈັນ, ອຳນາດການປົກຄອງໃໝ່ ຍັງໄດ້ສຸມໃສ່ວຽກງານສາທາລະນະສຸກ ແກ້ໄຂສຸຂະພາບໃຫ້ແກ່ປະຊາຊົນ, ພະນັກງານ, ພາລະການຜະລິດ ໃນ



ການສຶກສາ ຊັ້ນປະຖົມ ໃນນະຄອນຫລວງວຽງຈັນ ພາຍຫຼັງປ່ຽນແປງໃໝ່

ຂອບເຂດທົ່ວນະຄອນຫລວງ ໂດຍການປະຕິບັດນະໂຍບາຍລັດຖະກອນ, ທະຫານ, ຕຳຫລວດ, ກຳມະກອນ; ຂະຫຍາຍຕາໜ່າງການແພດລົງສູ່ບັນດາຮາກພະຍາດ ເປັນຕົ້ນຕໍ, ປິ່ນປົວເປັນສຳຄັນສົມທົບການປິ່ນປົວດ້ວຍຢາຫລວງ ແລະ ຢາພື້ນເມືອງ, ສາມາດສະກັດກັ້ນພະຍາດທີ່ຮ້າຍແຮງ ແລະ ຊຳເຮື້ອໄດ້ບາງຊະນິດ. ໃນນັ້ນ ພະຍາດໄຂ້ມະເລເລຍ (ໄຂ້ຍຸງ) ພະຍາດລຳໄສ້... ໄດ້ຖືເປັນວຽກງານກັນ ແລະ ປິ່ນປົວຫລາຍກວ່າໝູ່. ການຮັກສາສຸຂະພາບແມ່ ແລະ ເດັກໄດ້ຮັບການປັບປຸງເອົາໃຈໃສ່ນັບມື້ດີຂຶ້ນ ເຮັດໃຫ້ອັດຕາສ່ຽງຂອງເດັກໄດ້ຫລຸດລົງຢ່າງຈະແຈ້ງ.

ລວມຄວາມແລ້ວ: ວຽກງານແກ້ໄຂທາງດ້ານ ວັດທະນະທຳ - ສັງຄົມ ຢູ່ ນະຄອນຫລວງ ວຽງຈັນ ຕະຫລອດ 10 ປີຕົ້ນ ແຫ່ງການກໍ່ສ້າງລະບອບໃໝ່ ຂອງພວກເຮົາ ໄດ້ມີຫລາຍດ້ານສາມາດແກ້ໄຂໄດ້ເຮັດໃຫ້ສັງຄົມ ມີຄວາມສະຫງົບ ປົກກະຕິ. ຮອດປີ 1986, ທົ່ວ ນະຄອນຫລວງ ມີໂຮງຮຽນ ອະນຸບານ 31 ແຫ່ງ, ໂຮງຮຽນ ປະຖົມ 338 ແຫ່ງ,ໂຮງຮຽນ ມັດທະຍົມ 59 ແຫ່ງ, ໂຮງຮຽນ ອຸດົມ 10 ແຫ່ງ, ຖັນແຖວຄູອາຈານ ກໍ່ເຕີບໃຫຍ່ຂຶ້ນເລື້ອຍໆ ສາມາດຕອບສະໜອງໄດ້ ໃນການຂະຫຍາຍວຽກງານສຶກສາ. ດ້ານສາທາລະນະສຸກ ນະຄອນຫລວງວຽງຈັນ ມີໂຮງໝໍ 8 ແຫ່ງ, ສຸກສາລາປະຈຳບ້ານ 42 ແຫ່ງ, ຖັນແຖວ ແພດ ໝໍ ກໍ່ໄດ້ຮັບການສ້າງຂຶ້ນ ຢ່າງຕັ້ງໜ້າ. ປີ 1985 ມີແພດຊັ້ນສູງ 38 ຄົນ, ສະເລ່ຍແລ້ວ ປະຊາຊົນ ຈຳນວນ 10.000 ຄົນ ຈະມີ



ການເຮັດວຽກຂອງ ພະນັກງານ ແພດ - ໝໍ ຢູ່ໃນນະຄອນຫລວງວຽງຈັນ

ແພດຊັ້ນສູງ ຜູ້ໜຶ່ງຖ້າທຽບໃສ່ກ່ອນຊຸມປີ ບໍ່ທັນໄດ້ຮັບການປົດປ່ອຍ (ມີອັດຕາສ່ວນ ເພີ່ມຂຶ້ນ ເຖິງ 38 ເທື່ອ). ໃນນັ້ນ ບໍ່ນັບແພດຊັ້ນສູງຢູ່ໂຮງໝໍສູນກາງ. ວຽກງານຖະແຫຼງຂ່າວ, ໄດ້ຮັບການ ປັບປຸງຢ່າງຕັ້ງໜ້າ, ມີໜັງສືພິມ 2 ປະ ເພດຄື: ວຽງຈັນໃໝ່ ແລະ ໜຸ່ມນະຄອນຫຼວງ; ມີສະຖານີ ວິທະຍຸກະຈາຍສຽງ ແລະ ລະບົບໂທລະໂຄ່ງ, ວຽກງານການພິມ, ຈຳໜ່າຍໜັງສືພິມ ແລະ ປຶ້ມ ຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ສັງຄົມ ໃນລະດັບຕ່າງໆ ຢ່າງກວ້າງຂວາງ.

ໂດຍເຫັນແຈ້ງ ຄວາມໝາຍ ຄວາມສຳຄັນ ຂອງວຽກງານ ກໍ່ສ້າງພື້ນຖານ ໂຄງລ່າງວັດຖຸ - ເຕັກນິກ ຕໍ່ການພັດທະນາເສດຖະກິດ - ສັງຄົມ ຢູ່ນະຄອນຫລວງວຽງຈັນ, ນັບແຕ່ປີ 1976 - 1986 ຄະນະພັກ, ອຳນາດການປົກຄອງທ້ອງຖິ່ນ, ປະຊາຊົນບັນດາເຜົ່າ ໄດ້ເອົາໃຈໃສ່ຕໍ່ການຊີ້ ນຳ, ຈັດຕັ້ງນຳພາບັນດາຂະບວນການກໍ່ສ້າງກະສິກຳ, ອຸດສະຫະກຳ, ການຄົມມະນາຄົມ, ການ ສຶກສາ, ວັດທະນະທຳ - ສັງຄົມຢ່າງຕັ້ງໜ້າ, ສຸມໃສ່ລົງທຶນກໍ່ສ້າງຊົນລະປະທານ. ຮອດປີ1980, ສະເລ່ຍການລົງທຶນກໍ່ສ້າງພື້ນຖານ ໄດ້ເພີ່ມຂຶ້ນ 50%. ພິເສດ ນະຄອນຫລວງວຽງຈັນ ໄດ້ສຸມ ໃສ່ການກໍ່ສ້າງ ເຖິງ 100 ກວ່າ ກິດຈະກຳໃຫຍ່ ແລະ ຟື້ນຟູປັບປຸງເດີ່ນພະທາດຫລວງ, ສຸມໃສ່ ການກໍ່ສ້າງເຄຫາສະຖານ ແລະ ສະຖານທີ່ທ່ອງທ່ຽວຈຳນວນໜຶ່ງ. ພົ້ນເດ່ັນອີກດ້ານໜຶ່ງແມ່ນ ໄດ້ຕັ້ງໜ້າຮ່ວມມືກັບບັນດາອົງການຂອງສູນກາງ ໃນການຈັດສົ່ງພີ່ນ້ອງຮ່ວມຊາດ ທີ່ຖືກສັດຕູ ກວາດຕ້ອນມາໃນປາງສົງຄາມ ລວມທັງຊາວອົບພະຍົບທີ່ທາງການຂອງໄທ ສົ່ງກັບຄືນປະເທດ ກັບຄືນບ້ານເກີດເມືອງນອນຂອງເຂົາເຈົ້າ ເປັນຈຳນວນຫລວງຫລາຍ, ຈັດສັນທີ່ຢູ່ທຳກິນ ແລະ ຊ່ວຍເຫລືອປະຊາຊົນ ຜູ້ປະສົບໄພທຳມະຊາດ, ເບິ່ງແຍງດູແລຜູ້ເຈັບປ່ວຍ ແລະ ເສຍອົງຄະ, ເອົາໃຈໃສ່ເບິ່ງແຍງພະນັກງານ ຜູ້ທີ່ອອກພັກຜ່ອນກິນເບ້ຍບຳນານ ແລະ ຜູ້ທີ່ມີຄຸນງາມຄວາມ ດີຕໍ່ການປະຕິວັດໄດ້ເປັນຢ່າງດີ.

ຜົນສຳເລັດໃນການກໍ່ສ້າງ ນະຄອນຫລວງວຽງຈັນ ເຖິງຈະເປັນພຽງ ໄຊຊະນະໃນເບື້ອງ ຕົ້ນ ແຕ່ມັນກໍ່ໄດ້ປະກອບສ່ວນສຳຄັນ ເຂົ້າໃນການສຶກສາອົບຮົມກໍ່ສ້າງ ຄົນໃໝ່ສັງຄົມນິຍົມ, ຍົກລະດັບຄວາມຕື່ນຕົວຮັກຊາດ, ຮັກລະບອບໃໝ່ຂອງປະຊາຊົນຊາວ ນະຄອນຫລວງວຽງຈັນ, ເຮັດໃຫ້ມີການປ່ຽນແປງໃໝ່ຢ່າງຈະແຈ້ງ, ນັບມື້ປອດໃສຂາວສະອາດ ແລະ ໄດ້ສະແດງໃຫ້ເຫັນ ລັກສະນະດີເລີດ ຂອງລະບອບສັງຄົມນິຍົມຢູ່ ນະຄອນຫລວງ ຂອງ ສປປ ລາວ.

4. ຂົງເຂດວຽກງານ ການເມືອງ - ການປົກຄອງ.

*** ດ້ານວຽກງານປັບປຸງ - ກໍ່ສ້າງພັກ, ພະນັກງານ ແລະ ອົງການຈັດຕັ້ງມະຫາຊົນ.**

ຫລັງຈາກໄດ້ຮັບການແຍກຕົວອອກເປັນ 2 ແຂວງ: ແຂວງ ວຽງຈັນ ແລະ ແຂວງ ນະ ຄອນຫລວງວຽງຈັນ, ພາຍໃຕ້ການຊີ້ນຳ - ນຳພາຂອງພັກ, ໂດຍກົງແມ່ນອົງຄະນະພັກ ນະຄອນ

ຫລວງວຽງຈັນ ໄດ້ພ້ອມກັບປະຊາຊົນ, ທະຫານ, ຕຳຫລວດ, ຊັ້ນຄົນຕ່າງໆ ເດັດດ່ຽວສຸມໃສ່ການກໍ່ສ້າງ ນະຄອນຫລວງ ໃຫ້ໝັ້ນຄົງ ແລະ ເຂັ້ມແຂງໃນຮອບດ້ານ. ຕະຫລອດໄລຍະແຫ່ງການທົດສອບ, ຜ່ານຜ່າອຸປະສັກຫຍຸ້ງຍາກນາໆ ປະການ ໃນແນວຣົບປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເສດຖະກິດ, ການເມືອງ, ວັດທະນະທຳ - ສັງຄົມຂອງ ນະຄອນຫລວງວຽງຈັນ ດັ່ງກ່າວນັ້ນ, ຄະນະພັກ ອຳນາດການປົກຄອງ ແຕ່ລະຂັ້ນຂອງ ນະຄອນຫລວງວຽງຈັນ ໄດ້ຍຶດໝັ້ນ ແລະ ຖືເອົາວຽກງານປັບປຸງ ກໍ່ສ້າງລະບົບຜະເດັດການ ກຳມະຊີບ ເປັນສຳຄັນ ເພື່ອສ້າງເງື່ອນໄຂສະດວກ ແລະ ຖືເອົາວຽກງານກໍ່ສ້າງພັກ, ພະນັກງານ ຕິດພັນກັບຂະບວນການຂອງມະຫາຊົນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ ເປັນພື້ນຖານ ໃນການຊີ້ນຳ - ນຳພາທຸກຂົງເຂດວຽກງານ ຂອງການພັດທະນາ ນະຄອນຫລວງ ວຽງຈັນ.

ໂດຍສືບທອດ ເສີມຂະຫຍາຍພາລະກິດ ແລະ ມູນເຊື້ອອັນສະຫງ່າງາມ ຂອງພັກປະຊາຊົນປະຕິວັດລາວ, ຄະນະພັກ ນະຄອນຫລວງວຽງຈັນ ໄດ້ຕັ້ງໜ້າ ເຝິກຝົນຕົນເອງ, ຍົກລະດັບຄວາມ ຮູ້ຂອງຕົນທາງດ້ານທິດສະດີ, ການປະພຶດ ແລະ ສຶກສາ ອົບຮົມ ວຽກງານພັກ ກ່ຽວກັບ ລັດທິມາກ - ເລນິນ ແລະ ແນວທາງ ນະໂຍບາຍຂອງພັກ - ລັດ, ບົນພື້ນຖານ ດັ່ງກ່າວນັ້ນ ໄດ້ ປັບປຸງຫລັກໝັ້ນ, ທັດສະນະຂອງຊົນຊັ້ນກຳມະກອນ, ເພີ່ມທະວີຄວາມເຊື່ອໝັ້ນຕໍ່ການນຳພາ ຂອງສູນກາງພັກ, ເຊີດຊູຄວາມຕັດສິນໃຈ, ຜ່ານຜ່າຄວາມຫຍຸ້ງຍາກ ເປັນຫຼັກແຫຼ່ງ ໃນການເຕົ້າໂຮມຄວາມສາມັກຄີພາຍໃນ ກັບຂະບວນການ ຂອງມະຫາຊົນໃນໝູ່ ປະຊາຊົນ ຊັ້ນຄົນຕ່າງໆ ດ້ວຍການດຳເນີນຊີວິດ ການເມືອງ ຢ່າງເປັນປະຈຳ ແນໃສ່ເພື່ອຍົກສູງຄຸນນະພາບ ແລະ ປະສິດທິພາບ ແຫ່ງການນຳພາຂອງພັກ ໃຫ້ນັບມື້ນັບສູງຂຶ້ນ. ຕ້ານ ແລະ ສະກັດກັ້ນ ບັນດາທ່າອ່ຽງທີ່ບໍ່ຖືກຕ້ອງ, ແກ້ໄຂບັນດາຈຸດອ່ອນ ຄົງຄ້າງແຕ່ນ້ອຍໄປຫາໃຫຍ່. ຍ້ອນແນວນັ້ນ ຢູ່ໃນຂະບວນການນຳພາຂອງພັກ, ປະທານ ໄກສອນ ພົມວິຫານ ເລຂາທິການໃຫຍ່ ພັກປະຊາຊົນ ປະຕິວັດລາວ ໄດ້ໃຫ້ຄວາມສຳຄັນຕໍ່ ການນຳພາ ການປະຕິວັດ ຂອງພວກເຮົາວ່າ ໄຊຊະນະອັນສົມບູນ ຂອງການ ປະຕິວັດຊາດ - ປະຊາທິປະໄຕ ບັນດາຜົນສຳເລັດ ອັນໃຫຍ່ຫລວງ ໃນພາລະກິດ ແຫ່ງການປົກປັກຮັກສາ ແລະ ກໍ່ສ້າງລະບອບໃໝ່ນັ້ນ ລ້ວນແຕ່ຕິດພັນກັບການເຄື່ອນໄຫວ ຂອງ ພັກເຮົາ.

*** ດ້ານການຈັດຕັ້ງ:**

ສູນກາງ ໄດ້ເອົາໃຈໃສ່ ຊີ້ນຳ ຢ່າງໃກ້ຊິດ ຕໍ່ການປັບປຸງບູລະນະ ຄະນະພັກ ທຸກຂັ້ນ ພາຍໃນນະຄອນຫລວງວຽງຈັນ ໄປຄຽງຄູ່ກັບການຂະຫຍາຍ ສະມາຊິກພັກ, ກໍ່ສ້າງຮາກຖານພັກ ໃຫ້ຫລາຍກວ່າເກົ່າ. ຢ່າງໃດກໍ່ດີ ເມື່ອໆຈາກ ນະຄອນຫລວງ ໄດ້ກຳເນີດຂຶ້ນ ໃນສະພາບແວດລ້ອມ

ຂອງປະເທດຊາດ ທີ່ປະກອບດ້ວຍການກະສິກຳ ຫຼ້າຫຼັງແລ້ວກ້າວຂຶ້ນສັງຄົມນິຍົມ. ໃນ 10 ປີ ຜ່ານມາ (1976 -1986), ຢູ່ ນະຄອນຫລວງວຽງຈັນ ຈຳນວນສະມາຊິກພັກ ໄດ້ເພີ່ມຂຶ້ນ 6 ເທົ່າ, ມີໜ່ວຍພັກ ເພີ່ມຂຶ້ນ 4 ເທົ່າ, ຄະນະພັກ ເພີ່ມຂຶ້ນ 2 ເທົ່າ; ການຈັດຕັ້ງ, ລະບຽບແບບ ແຜນ ແລະ ວິທີເຮັດວຽກ ຂອງຄະນະພັກ ຂັ້ນຕ່າງໆ ລ້ວນແຕ່ໄດ້ຮັບການປັບປຸງໃຫ້ ກ້າວໜ້າ ເລື້ອຍໆ ເຮັດໃຫ້ການນຳພາມີບາດກ້າວໃໝ່. ໃນການປັບປຸງລະບົບຜະເດັດການ ກຳມະຊີບ ນັ້ນ. ກ່ອນອື່ນໝົດ ຈະຕ້ອງບູລະນະ ການຈັດຕັ້ງພັກຢູ່ຂັ້ນຕ່າງໆ, ເຮັດໃຫ້ອົງການຈັດ ຕັ້ງນຳພາ ແລະ ຄຸ້ມຄອງເຊີດຊູກຳລັງສູ້ຮົບ ຂອງການຈັດຕັ້ງຮາກຖານສູງຂຶ້ນ.

ກ່ຽວກັບການກໍ່ສ້າງຖັນແຖວພະນັກງານ, ລັດຖະກອນໄລຍະໃໝ່ຂອງການປະຕິວັດ, ຖັນ ແຖວພະນັກງານໃນທົ່ວ ນະຄອນຫລວງວຽງຈັນ ໃນດ້ານຈຳນວນແມ່ນມີໜ້ອຍ, ບົດຮຽນຊ້ຳ ພັດ ບໍ່ທັນໝາຍ ຕະຫຼອດ 10 ປີຜ່ານມາ, ການກໍ່ສ້າງ ແລະ ປັບປຸງບັນດາອົງການຈັດຕັ້ງພັກ - ລັດ ແລະ ອົງການຈັດຕັ້ງມະຫາຊົນ ແມ່ນບໍ່ສາມາດ ຈະຕັດແຍກອອກຈາກວຽກງານ " **ພະນັກງານ ແລະ ການເສີມຂະຫຍາຍ ບົດບາດຂອງພະນັກງານ ສະມາຊິກພັກ** " ❶

ຍ້ອນແນວນັ້ນ ນະຄອນຫລວງວຽງຈັນ ຈຶ່ງໄດ້ເອົາໃຈໃສ່ຕໍ່ການຊີ້ນຳ, ກໍ່ສ້າງກຳລັງສຶບ ທອດພາລະກິດປະຕິວັດ, ເຮັດໃຫ້ບົດບາດ ເປັນເຈົ້າລວມໝູ່ຂອງມະຫາຊົນ ໃນການປະຕິບັດ ສອງໜ້າທີ່ຍຸດທະສາດ ກາຍເປັນພາລະກຳອັນໜັກໜ່ວງ ຂອງທົ່ວປວງຊົນເຮົາ, ອອກແຮງ ສຶກ ສາອົບຮົມ ໂດຍຖືເອົາການເຝິກຝົນຫລໍ່ຫຼອມ, ທົດສອບໃນຂະບວນການຕ່າງໆ ຢູ່ໃນສັງຄົມຢ່າງ ເນື້ອງນິດລຸ່ນຕິດ, ຊາວໜຸ່ມ ນະຄອນຫລວງວຽງຈັນ ໂດຍມີຄະນະ ຊາວໜຸ່ມ ເປັນຫລັກແຫລ່ງ ໄດ້ສ້າງບັນດາຜົນງານ ຈາກຂະບວນການແຂ່ງຂັນ " **ສາມສາມັກຄີສີ່ບຸກ** " ພິເສດ ແມ່ນໄດ້ຕະ ລຸມບອນ ໄປຮັບໃຊ້ແນວໜ້າ ຕີຕ້ານການບຸກຢຶດຂອງ ພວກປະຕິການຂວາຈັດໄທ ເຂົ້າສາມໝູ່ ບ້ານຂອງລາວ ທີ່ແຂວງ ໄຊຍະບູລີ, ບັນດາເຂດຊາຍແດນລຽບຕາມລຳນ້ຳຂອງ ຂອງນະຄອນ ຫລວງວຽງຈັນ ປະກອບສ່ວນ ບັນດາຂະບວນການອອກແຮງງານ ກໍ່ສ້າງເສດຖະກິດ, ຕ້ານໄພ ທຳມະຊາດ ແລະ ອື່ນໆ. ໄປພ້ອມໆກັບການເຕີບໃຫຍ່ຂະຫຍາຍຕົວ ຂອງອົງການຈັດຕັ້ງຊາວ ໜຸ່ມ, ນະຄອນຫລວງວຽງຈັນ ຍັງໄດ້ເອົາໃຈໃສ່ຕໍ່ການຂະຫຍາຍຕົວຂອງ " **ເຍົາວະຊົນ** " ອັນ ເປັນໜໍ່ແໜງສຳຄັນ ຂອງປະເທດຊາດ, ເປັນເຈົ້າການສຶກສາ ອົບຮົມຄົນຮຸ່ນໜຸ່ມນ້ອຍ ອະນຸຊົນ, ເຍົາວະຊົນ ເຮັດໃຫ້ເຂົາເຈົ້າກາຍເປັນຄົນໃໝ່ສັງຄົມນິຍົມ, ເປັນຜູ້ສືບທອດພາລະກິດ ຂອງປະ ເທດຊາດ ໃນອານາຄົດ.

---

1. ເອກະສານກອງປະຊຸມ ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ ປີ 1986, ໜ້າ 186

*** ກ່ຽວກັບອົງການຈັດຕັ້ງແມ່ຍິງ ນະຄອນຫລວງວຽງຈັນ.**

ປະເທດຊາດໄດ້ຮັບການປົດປ່ອຍ, ພັກ - ລັດ ໄດ້ມີແຜນນະໂຍບາຍ ໃນການກໍ່ສ້າງຖັນແຖວຊາວໜຸ່ມຍິງ - ຊາຍ, ການນຳນະຄອນຫລວງວຽງຈັນ ກໍ່ໄດ້ຖືເອົາການສຶກສາອົບຮົມແມ່ຍິງເຜົ່າຕ່າງໆ ໃຫ້ເຫັນແຈ້ງຕໍ່ຜົນປະໂຫຍດທີ່ການປະຕິວັດ ໄດ້ນຳມາໃຫ້ປະຊາຊົນ ຊັ້ນຄົນຕ່າງໆ ໃນນະຄອນຫລວງວຽງຈັນ, ແນໃສ່ເຮັດໃຫ້ເຂົາເຈົ້າມີຄວາມຕື່ນຕົວ, ຫ້າວຫັນເຂົ້າຮ່ວມບັນດາຂະບວນການສ້າງສິດສະເໝີພາບລະຫວ່າງຍິງ - ຊາຍ. ໂດຍເຫັນແຈ້ງຕໍ່ພາລະກິດອັນໃຫຍ່ຫຼວງຂອງຊາດ, ຖັນແຖວເອື້ອຍນ້ອງແມ່ຍິງໄດ້ປະກອບສ່ວນ ຢ່າງສຳຄັນໃນການດັດສ້າງ ແລະ ກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳ ໃນການກໍ່ສ້າງແມ່ຍິງລາວໃໝ່ສັງຄົມນິຍົມ ຕາມຄຳຂວັນ " **ສາມດີສອງໜ້າທີ່** ". ໃນໄລຍະປະຫວັດສາດ ຕໍ່ສູ້ກູ້ຊາດສອງສະໄໝ (ຕ້ານລ່າເມືອງຂຶ້ນຝຣັ່ງ ແລະ ອາເມລິກາ 1945 - 1975), ແມ່ຍິງ ນະຄອນວຽງຈັນ ກໍ່ໄດ້ອອກແຮງປະກອບສ່ວນສຳຄັນ ໃຫ້ແກ່ການປະຕິວັດລວມຂອງຊາດ, ເປັນຜູ້ຫ້າວຫັນປະກອບສ່ວນກໍ່ສ້າງຮາກຖານການເມືອງຢູ່ໃນຕົວເມືອງ, ຊົນນະບົດ; ເປັນກອງຫຼອນຈັບປືນຮ່ວມກັບເພດຊາຍ ເພື່ອຕໍ່ສູ້ກັບສັດຕູ. ໃນຊຸມປີ 1945 (ການປະຕິວັດ ເດືອນ 8), ແມ່ຍິງ ໃນນະຄອນຫລວງ ກໍ່ໄດ້ອອກໜ້າເດີນຂະບວນປະທ້ວງເຈົ້າໜ້າທີ່ຝ່າຍວຽງຈັນ. ຕໍ່ມາ ຊຸມປີ 1957 - 1962, ໃນຂະນະທີ່ 2 ກຳລັງໄດ້ຈັດຕັ້ງ ລັດຖະບານປະສົມຂຶ້ນຢູ່ວຽງຈັນນັ້ນ. ແມ່ຍິງ ນະຄອນຫລວງວຽງຈັນ ກໍ່ໄດ້ສະແດງຕົນເປັນຜູ້ເກັ່ງກ້າ ອອກໜ້າຕໍ່ສູ້ດ້ານການເມືອງ, ກົດໝາຍ ທວງໃຫ້ລັດຖະບານ ຫຸ່ນວຽງຈັນ ປ່ອຍຕົວຜູ້ນຳຂອງການປະຕິວັດ, ປ່ອຍຕົວບັນດາພະນັກງານ, ນັກຮົບປະຕິວັດ ທີ່ຖືກກັກຂັງ, ຊ່ວຍເຫລືອແກ່ນສານປະຕິວັດ, ປິດໜູບັງຕາອຳນາດການປົກຄອງ ຂອງສັດຕູ ເພື່ອຊຸກເຊື່ອງອຸ້ມຊູພະນັກງານປະຕິວັດພວກເຮົາ, ໃນຂະບວນການນັ້ນ ເດັ່ນກວ່າເພື່ອນ ກໍ່ແມ່ນບັນດາ ແມ່ຍິງ ນັກຮົບ ຢູ່ເຂດບ້ານ ໜອງຈັນ, ບ້ານ ຝາຍ (ໃຈກາງ ນະຄອນ ຫລວງວຽງຈັນ), ເມືອງ ເຟືອງ, ບ້ານ ນາຍາງ, ເມືອງ ນາຊາຍທອງ, ເມືອງ ໂພນໂຮງ... ທີ່ໄດ້ຊ່ວຍເຫລືອລ້ຽງດູອ້າຍນ້ອງນັກຮົບ ກອງປ້ອງກັນທີ່ຕັ້ງສຳນັກງານ ແນວລາວຮັກຊາດ ປະຈຳ ຢູ່ວຽງຈັນ (1962 - 1975); ຕິດຕໍ່ພົວພັນຊ່ວຍເຫລືອພະນັກງານ - ນັກຮົບປະຕິວັດ, ເຄື່ອນໄຫວໂຄສະນາແນວທາງການປະຕິວັດຢູ່ທ້ອງຖິ່ນ ສິ່ງເຂົ້າ - ນ້ຳຊາມປາ ໃຫ້ພະນັກງານ ແກ່ນ ສານປະຕິວັດ ທີ່ລັບໆລີ້ໆ ຢູ່ປ່າດົງພົງໄພ ໃນຍາມຂັບຂັນແຕ່ຕົ້ນຕະຫລອດປາຍ ແລະ ອື່ນໆ ອີກ[1]. ມາຮອດສະໄໝປະເທດຊາດ ກ້າວເຂົ້າສູ່ໄລຍະແຫ່ງການກໍ່ສ້າງ ແລະ ຟື້ນຟູເສດຖະກິດ, ນະຄອນຫລວງວຽງຈັນ ໄດ້ມີເອື້ອຍນ້ອງ

---

1. ປະຫວັດສາດ ກອງຮ້ອຍ ຫີນເພັດ, ປີ 2008, ກົມ ວສ - ປສ ການທະຫານ.

ແມ່ຍິງ ຈຳນວນບໍ່ໜ້ອຍ ທີ່ມີຜົນງານອັນດີເດັ່ນ ໃນ ການປະກອບສ່ວນສ້າງສະຫະກອນ, ຟື້ນຟູ ແລະ ເສີມຂະຫຍາຍຫັດຖະກຳ, ສ້າງເສດຖະກິດຄອບຄົວ ປະກອບສ່ວນເຂົ້າເປັນພະນັກງານ ຂັ້ນຕ່າງໆ ຢູ່ໃນອົງການຂອງລັດ, ເອກະຊົນ, ໂຮງຈັກ, ໂຮງງານ, ໂຮງຮຽນຕ່າງໆ ພິເສດໃນຂະ ແໜງຄູ ແລະ ສາທາລະນະສຸກ. ແມ່ຍິງໄດ້ເປັນຜູ້ຍົກສູງ, ຄວາມສາມາດພຽງພໍໃນການສ້າງ ບ້ານແປງເມືອງ. ດ້ານການຈັດຕັ້ງແມ່ຍິງ ໃນປະຈຸບັນນະຄອນຫລວງວຽງຈັນ ໄດ້ມີສະຫະພັນ ແມ່ຍິງ ນະຄອນຫລວງວຽງຈັນ ມີການຈັດຕັ້ງທີ່ແໜ້ນ ແກ່ນຂອງຕົນແຕ່ຂັ້ນ ນະຄອນຫລວງວຽງ ຈັນ ລົງຮອດທ້ອງຖິ່ນ (ຮາກຖານ) ມີສະມາຊິກ ແມ່ ຍິງ ກວ່າ 22.700 ຄົນ.

ກ່ຽວກັບອົງການກຳມະບານ ໄປພ້ອມໆກັບການເຕີບໃຫຍ່ຂະຫຍາຍຕົວ ແຫ່ງການກໍ່ສ້າງ ຮາກຖານວັດຖຸ - ເຕັກນິກ, ຈຳນວນກຳມະກອນ ບັນດາຂະແໜງໂຮງຈັກ, ໂຮງງານຕ່າງໆ ໄດ້ ເພີ່ມທະວີຂຶ້ນຢ່າງຫຼວງຫຼາຍ, ພາຍໃຕ້ການນຳພາຂອງພັກ, ອຳນາດການປົກຄອງ ນະຄອນຫຼວງ ວຽງຈັນ ກໍ່ໄດ້ອອກແຮງຈັດຕັ້ງຄຸ້ມຄອງ ແລະ ຂະຫຍາຍອົງການກຳມະບານ ຢ່າງກວ້າງຂວາງ ເຮັດໃຫ້ຮາກຖານເສດຖະກິດ - ວັດທະນະທຳ - ສັງຄົມ ນະຄອນຫລວງ ຄ່ອຍໆ ມີຄວາມໝັ້ນ ຄົງຂຶ້ນ. ອົງການສຳນັກງານ ກໍ່ໄດ້ເພີ່ມທະວີສິດເປັນເຈົ້າລວມໝູ່ ໃນການຜະລິດ, ທຸລະກິດ, ການຄຸ້ມຄອງ ກໍ່ສ້າງແບບແຜນການອອກແຮງງານຢ່າງມີລະບຽບວິໄນ, ມີເຕັກນິກ ແລະ ຄຸນນະ ພາບຂອງວຽກງານ, ສົ່ງເສີມຫົວຄິດປະດິດສ້າງ ແລະ ຈິດໃຈປະຢັດມັດທະຍັດ, ກຸ້ມຕົນເອງເພິ່ງ ຕົນເອງເປັນພື້ນຖານ. ໄປຄຽງຄູ່ກັນນັ້ນ ການເອົາໃຈໃສ່ເບິ່ງແຍງດູແລຊີວິດການເປັນຢູ່ທາງດ້ານ ວັດຖຸ ແລະ ຈິດໃຈຂອງກຳມະກອນ ກໍ່ໄດ້ຍົກເປັນບັນຫາສຳຄັນຢູ່ໃນສັງຄົມ. ປີ 1985, ນະຄອນ ຫລວງວຽງຈັນ ໄດ້ມີສະມາຊິກກຳມະກອນປະມານ 6.700 ຄົນ ທີ່ເຄື່ອນໄຫວຢູ່ບັນດາ ໂຮງງານ ຂອງລັດ - ເອກະຊົນ (ໃນນັ້ນມີທັງ ຍິງ ແລະ ຊາຍ ບັນດາເຜົ່າ).

* **ກ່ຽວກັບວຽກງານແນວໂຮມ:** ມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ IV 13/ 11/1986. ໄດ້ເນັ້ນໜັກຕໍ່ແນວທາງໜ້າທີ່ ຂອງການປະຕິວັດປະເທດເຮົາ ໄລຍະໃໝ່ ໄລ ຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ຄື: "... ປັບປຸງ ແລະ ເພີ່ມທະວີຜະເດັດການກຳມະຊີບຢ່າງບໍ່ ຢຸດຢັ້ງ, ຈັດຕັ້ງ ແລະ ຮັບປະກັນ ໃຫ້ປະຊາຊົນຜູ້ອອກແຮງງານ ເຜົ່າຕ່າງໆ ສາມັກຄີແໜ້ນແຟ້ນ ແລະ ເສີມຂະຫຍາຍສິດເປັນເຈົ້າປະເທດຊາດ, ເປັນເຈົ້າສັງຄົມ, ເປັນເຈົ້າຕົນເອງ, ດຳເນີນການ ປະຕິວັດ ທັງ 3 ປະເພດ ໄປພ້ອມກັນ ຄື: ການປະຕິວັດ ທາງດ້ານກຳລັງການຜະລິດ, ການປະ ຕິວັດທາງດ້ານການພົວພັນການຜະລິດ, ການປະຕິວັດແນວຄິດ ແລະ ວັດທະນະທຳ. ໃນນັ້ນ, ການປະຕິວັດທາງດ້ານກຳລັງການຜະລິດ ມີຄວາມໝາຍຕັດສິນ ແລະ ໃນການປະຕິວັດແນວ ຄິດວັດທະນະທຳ ນັ້ນການສຶກສາເປັນໃຈກາງ ແລະ ໄປກ່ອນກ້າວໜຶ່ງ..." ໂດຍເຫັນແຈ້ງ ແລະ

ເຊື່ອມຊຶມຕໍ່ໜ້າທີ່ໃໝ່ຂອງຕົນ, ຄະນະພັກ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ເດັດດ່ຽວຊີ້ນຳປັບປຸງ ແລະ ຂະຫຍາຍອົງການແນວລາວສ້າງຊາດທຸກຂັ້ນ, ແນໃສ່ເພື່ອເຕົ້າໂຮມຄວາມສາມັກຄີບັນດາເຜົ່າ, ປຸກລະດົມປະຊາຊົນທຸກຊັ້ນຄົນ, ສາສະໜາເຂົ້າຮ່ວມໃນແນວທາງປົກປັກຮັກສາ ແລະ ພັດທະນາປະເທດຊາດ ສະເພາະ ແມ່ນສ້າງ ນະຄອນຫລວງວຽງຈັນ ໃຫ້ຢັ້ງຢືນ.❶

5. ວຽກງານພົວພັນກັບພາຍນອກ:

" ເພີ່ມທະວີຄວາມສາມັກຄີ ເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນ ເປັນສາເຫດອັນສຳຄັນຍິ່ງ ແຫ່ງໄຊຊະນະ ທຸກຢ່າງຂອງການປະຕິວັດ ປະເທດເຮົາ"❷. ນັບແຕ່ມື້ໄດ້ຮັບການສ້າງຕັ້ງເປັນ " **ນະຄອນຫລວງວຽງຈັນ** ", ຄະນະພັກ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ກໍ່ໄດ້ອອກແຮງ ສ້າງບັນດາຜົນງານ ທີ່ເອກອ້າງ ທະນົງໃຈ ຂອງຕົນ ເຂົ້າສູ່ຖັນແຖວວຽກງານສຳຄັນ ກໍ່ສ້າງ ນະຄອນຫລວງ ໂດຍຮອບດ້ານ ຢູ່ບົນພື້ນຖານ ແຫ່ງການເຊື່ອມຊຶມ ແນວທາງຂອງພັກ ການປະຕິບັດ ບັນດາໜ້າທີ່ຂອງແຜນການ ພັດທະນາ ເສດຖະກິດ - ສັງຄົມ, ຖ້າຈະອີງໃສ່ແຕ່ກຳລັງຂອງລັດ - ຂອງນະຄອນຫລວງ ເທົ່ານັ້ນ ກໍ່ບໍ່ສາມາດທີ່ຈະສຳເລັດໄດ້. ດ້ວຍເຫດນັ້ນ, ຕະຫລອດໄລຍະ 10 ປີ ແຫ່ງການກໍ່ສ້າງ ແລະ ດັດສ້າງເສດຖະກິດ - ສັງຄົມ ພາຍໃນ ນະຄອນຫລວງວຽງຈັນ, ດ້ວຍຄວາມເອົາໃຈໃສ່ ແລະ ເຫັນໄດ້ບັນດາກິດເກນ ແຫ່ງການພົວພັນ ທີ່ເປັນມູນເຊື້ອຂອງຊາດເຮົາ ກັບບັນດາປະເທດໃກ້ຄຽງ ແລະ ເພື່ອນມິດສາກົນໃນໂລກ. ດ້ານໜຶ່ງ, ຮັບຮູ້ ແລະ ເຊື່ອມຊຶມ ແນວທາງຂອງພັກ ທີ່ວ່າ: ຄວາມສາມັກຄີພິເສດ, ການຮ່ວມສຳພັນສູ້ຮົບ ແລະ ຮ່ວມມືຮອບດ້ານ ລະຫວ່າງລາວ - ຫວຽດນາມ ແລະ ກຳປູເຈຍ ທີ່ເປັນກິດເກນຄົງຕົວ ແລະ ຂະຫຍາຍຕົວຂອງແຕ່ລະປະເທດ, ເປັນປັດໄຈພື້ນຖານອັນໜຶ່ງ ໃນການຕັດສິນໄຊຊະນະ ຂອງການປະຕິວັດແຕ່ລະປະເທດ. ຄະນະພັກ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ແລະ ປະຊາຊົນບັນດາເຜົ່າ ພວກເຮົາໄດ້ປະຕິບັດການຮ່ວມມື ຮອບດ້ານ ກັບບັນດາ ນະຄອນໝວງຮ່າໂນ້ຍ, ໂຮ່ຈີ່ມິນ ສ.ສ ຫວຽດນາມ ອັນເປັນການປະກອບສ່ວນສຳຄັນ ເຂົ້າໃນການກໍ່ສ້າງ ເສດຖະກິດ - ສັງຄົມ ກໍ່ຄືການເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນ ມີຄວາມສະຫງົບ. ໃນນັ້ນ, ດ້ານໜຶ່ງ ຂອງການຮ່ວມມື ກໍ່ແມ່ນການກໍ່ສ້າງພື້ນຖານ ໂຄງລ່າງ ເສດຖະກິດ, ກໍ່ສ້າງພະນັກງານວິຊາການ ຂັ້ນຕ່າງໆ... ກັບປະເທດກຳພູຊາ, ນະຄອນຫລວງວຽງຈັນ ກໍ່ໄດ້ແຮກສ່ຽວກັບ ນະຄອນພະນົມເປັນ ຊຶ່ງທັງສອງຝ່າຍ ໄດ້ພ້ອມກັນຊອກຫາວິທີຕ່າງໆ ເພື່ອເຮັດໃຫ້ການຮ່ວມ

---

1. ເອກະສານກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ1986, ໜ້າ 285.

2. ບົດຮຽນຊີ້ນຳ ສົງຄາມ ຂອງພັກປະຊາຊົນປະຕິວັດລາວ, ເອກະສານ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງ ພັກ1986, ໜ້າ36.

ມີທາງດ້ານເສດຖະກິດ, ວັດທະນາທຳ - ສັງຄົມ, ການແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນກໍ່ສ້າງພະນັກງານໃຫ້ຫລາຍ ແລະ ມີຜົນໄດ້ຮັບສູງຂຶ້ນ.

ກ່ຽວກັບການພົວພັນກັບແຂວງໜອງຄາຍປະເທດໄທ ທີ່ມີຊາຍແດນຕິດຈອດກັນຂອງ 2 ປະເທດ, ໂດຍປະຕິບັດຕາມຄຳຖະແຫຼງການຮ່ວມ ແລະ ຂໍ້ຕົກລົງຕ່າງໆ ລະຫວ່າງ ລັດຖະບານ ຂອງປະເທດທັງສອງ (ລາວ - ໄທ), ນະຄອນຫລວງວຽງຈັນ ແລະ ແຂວງ ໜອງຄາຍ ໄດ້ເປີດການພົວພັນທາງດ້ານການຄ້າ ກີລາຮ່ວມກັນສ້າງສາຍພົວພັນ ບ້ານໃກ້ເຮືອນຄຽງ, ບ້ານພີ່ເມືອງນ້ອງ ລະຫວ່າງ ປະຊາຊົນ 2 ຊາດ ລາວ - ໄທ.

*** ບັນດາ ສະຫາຍ ຄະນະນຳ ນະຄອນຫລວງວຽງຈັນ ທີ່ໄດ້ຮັບເລືອກຕັ້ງ ສະໄໝ ທີ I (13/3/1986), ມີດັ່ງນີ້:**

1. ສະຫາຍ ສີສະຫວາດ ແກ້ວບຸນພັນ ຄະນະເລຂາທິການສູນກາງພັກ ເປັນເລຂາຄະນະພັກ ນະຄອນຫລວງ ວ່າການເຈົ້າຄອງ ນະຄອນຫລວງ; ອະດີດ ຫົວໜ້າ ເສນາທິການ ກອງທັບປົດປ່ອຍ ປະຊາຊົນລາວ, ສະມາຊິກພັກ ຄອມມູນິດ ອິນດູຈີນ 1948 - 1955.

2. ສະຫາຍ ຄຳບູ່ ສຸນີໄຊ ກຳມະການ ສູນກາງພັກ ເປັນຮອງເລຂາ ຄະນະພັກ ນະຄອນຫລວງວຽງຈັນ.

3. ສະຫາຍ ທອງມະນີ ທິພິມມະຈັນ ຄະນະປະຈຳພັກ ນະຄອນຫລວງວຽງຈັນ.

4.ສະຫາຍ ສີບຸນຄຸນ ທອງບາງ ຄະນະປະຈຳພັກ.

5.ສະຫາຍ ຈານນອງ ອິນທະວົງ ຄະນະປະຈຳພັກ.

6.ສະຫາຍ ສີທົນ ສີບຸນເຮືອງ ກຳມະການພັກ.

7.ສະຫາຍ ກອງແພງ ສຸດຕະວົງ ກຳມະການພັກ.

8.ສະຫາຍ ພົມພາເທບ ຄຳເຮືອງ ກຳມະການພັກ.

9.ສະຫາຍ ສີໂທ ບັນນະວົງ ກຳມະການພັກ.

10. ສະຫາຍ ຈັນດາ ຄຳສີ ກຳມະການພັກ.

11. ສະຫາຍ ຄຳປົງ ສຸລິນພູມີ ກຳມະການພັກ.

12.ສະຫາຍ ນາງ ສົມໝາຍ ວົງນະຄອນ ກຳມະການພັກ.

13. ສະຫາຍ ໄຊ ພະກະຊຸມ ກຳມະການພັກ.

14. ສະຫາຍ ໄພວັນ ກຳມະການພັກ.

15. ສະຫາຍ ວົງຄຳ ພົນລະສີ ກຳມະການພັກ.

16. ສະຫາຍ ກ້ຽງຄຳເກດ ກຳມະການພັກ.

17. ສະຫາຍ ບຸນສີງ ສີມມາລາວົງ ກຳມະການພັກ.
18. ສະຫາຍ ຄຳເກື່ອນ ສີລາເພັດ ກຳມະການພັກ, ເລຂາພັກ ເມືອງ ນາຊາຍທອງ.
19. ສະຫາຍ ສະຫວ່າງ ໄຊຄຳເພັງ ກຳມະການພັກ, ເລຂາພັກ ເມືອງ ໄຊເຊດຖາ.
20. ສະຫາຍ ຄຳລຽນ ດວງຜາສຸກ ກຳມະການພັກ, ເລຂາພັກ ເມືອງ ໄຊທານີ.
21. ສະຫາຍ ບຸນເລີດ ສຸລິຍະວົງ ກຳມະການພັກ, ເລຂາພັກ ເມືອງ ຫາດຊາຍຟອງ
22. ສະຫາຍ ທອງມີ ພົມມີໄຊ ກຳມະການພັກ, ເລຂາພັກ ເມືອງ ຈັນທະບູລີ.
23. ສະຫາຍ ຄຳພວງ ມັນວົງສາ ກຳມະການພັກ.
24.ສະຫາຍ ຄຳມະນີ ພັນທະວົງສີ ກຳມະການພັກ, ເລຂາພັກ ເມືອງ ສີສັດຕະນາກ.
25. ສະຫາຍ ຄຳຍອດ ກຳມະການພັກ, ເລຂາພັກ ເມືອງ ສີໂຄດຕະບອງ.

- ສະເພາະເມືອງ ສັງທອງ ແລະ ເມືອງ ປາກງື່ມ ແມ່ນບໍ່ທັນມີຄະນະພັກ ແລະ ໄດ້ຮັບການສ້າງຕັ້ງຕາມຫລັງກອງປະຊຸມອົງຄະນະພັກ ນະຄອນຫລວງ ຄັ້ງທີ I.

- ກ່ຽວກັບການຈັດຕັ້ງຄຸ້ມຄອງລັດ, ອົງການຊີ້ນຳ ທີ່ຂຶ້ນກັບ ນະຄອນຫລວງວຽງຈັນ ສະໄໝທີ I (13/3/1986) ລວມມີ 16 ອົງການພື້ນຖານ ຄື:

1. ຫ້ອງການພັກ, ປົກຄອງ ແລະ ສະພາ ນະຄອນຫລວງ, ສະຫາຍ ສີໂທ ບັນນະວົງ ຮັບຜິດຊອບ.
2. ພະແນກທະຫານ, ສະຫາຍ ສີບຸນ ຄູນທອງບາງ ຮັບຜິດຊອບ.
3. ພະແນກສານ, ສະຫາຍ ຄຳຜົງ ຮັບຜິດຊອບ.
4. ພະແນກໂຄສະນາອົບຮົມ, ສະຫາຍຈານນອງ ອິນທະວົງ ຮັບຜິດຊອບ.
5. ພະແນກອຸດສະຫະກຳ ແລະ ການຄ້າ, ສະຫາຍ ກອງແພງ ສຸດຕະວົງ ຮັບຜິດຊອບ.
6. ພະແນກການເງິນ ແລະ ການຮ່ວມມື, ສະຫາຍ ສີທົນ ສີບຸນເຮືອງ ຮັບຜິດຊອບ.
7. ຫ້ອງການແນວໂຮມ, ສະຫາຍ ອິນແປງ ກົງຊະນະ ຮັບຜິດຊອບ.
8. ຫ້ອງການສະຫະພັນແມ່ຍິງ, ສະຫາຍນາງ ສົມໝາຍ ວົງນະຄອນ ຮັບຜິດຊອບ.
9. ພະແນກສຶກສາ, ສະຫາຍ ຄຳຜອງ ພັນວົງສາ ຮັບຜິດຊອບລວມ.
10. ພະແນກຈັດຕັ້ງກໍ່ສ້າງພະນັກງານ, ສະຫາຍ ກ້ຽງຄຳເກດ ຮັບຜິດຊອບ.
11. ທະນາຄານ, ສະຫາຍ ບຸນສົ່ງສົມ ມາລາວົງ ຮັບຜິດຊອບ.
12. ພະແນກໂຍທາ ຫຼື ຄົມມະນາຄົມຂົນສົ່ງ, ສະຫາຍ ໄຊພະກະຊຸມ ຮັບຜິດຊອບ.
13. ອົງການຊາວໜຸ່ມ, ສະຫາຍ ວົງຄຳ ພົນລະມີ ຮັບຜິດຊອບ.
14. ອົງການກຳມະບານ, ສະຫາຍ ຈັນດາ ຄຳສີ ຮັບຜິດຊອບ.
15. ພະແນກກະສິກຳ - ປ່າໄມ້, ສະຫາຍ ອຸລິດ, ສະຫາຍ ຄຳຫລ້າ ຮັບຜິດຊອບ.

II. ນະຄອນຫລວງວຽງຈັນ ໃນໄລຍະດຳເນີນພາລະກິດ ປ່ຽນແປງໃໝ່ຮອບດ້ານຢ່າງມີຫລັກການຂອງພັກ, ແຕ່ປີ 1986 - 2000.

ກ. ນະຄອນຫລວງວຽງຈັນ ດຳເນີນພາລະກິດ ປ່ຽນແປງໃໝ່ ແຕ່ປີ 1986 -1990.

ມາຮອດທ້າຍປີ ວັນທີ 13/11/1986 ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ ປະຊາຊົນ ປະຕິວັດລາວ ໄດ້ໄຂຂຶ້ນ ແລະ ດຳເນີນຢູ່ໃຈກາງ ນະຄອນຫລວງວຽງຈັນ. ໃນກອງປະຊຸມໃຫຍ່ຄັ້ງນີ້ ໄດ້ສັງເກດຕີລາຄາຄືນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ຖອດຖອນບົດຮຽນ ຜ່ານການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ ໃນເບື້ອງຕົ້ນ ໄລຍະແຕ່ປີ 1975 - 1985; ພ້ອມທັງໄດ້ກຳນົດທິດທາງ, ນະໂຍບາຍ ໂດຍສະເພາະ ແນວທາງປ່ຽນແປງໃໝ່ຮອບດ້ານ ທີ່ມີຫລັກການຂອງພັກ. ເຊິ່ງກອງປະຊຸມ ໄດ້ຕີລາຄາເປັນເອກະພາບກັນວ່າ ໃນໄລຍະຜ່ານມາການດັດສ້າງ ແລະ ກໍ່ສ້າງ ສັງຄົມນິຍົມ, ພັກເຮົາໄດ້ປ້ອງກັນບໍ່ໃຫ້ເກີດ 2 ທ່າອ່ຽງຄື: ອ່ຽງຂວາ, ຢຸດໆຍ່ອນໆ ຫຼື ວ່າອ່ຽງຊ້າຍ, ອັດຕະວິໄສ, ຟ້າວຟັ່ງ. ໃນ 10 ປີ ຜ່ານມາ, ຢູ່ໃນຫຼາຍບ່ອນ ເຖິງແມ່ນວ່າ ເງື່ອນໄຂຢູ່ໃນ ບ່ອນນັ້ນ, ໄດ້ສຸກງອມແລ້ວ, ແຕ່ຊ້ຳພັດລັ່ງໆເລໆ, ບໍ່ເດັດດ່ຽວດຳເນີນການດັດສ້າງສັງຄົມນິຍົມ ເພື່ອຈະສ້າງປະຖົມປັດໄຈ ທາງດ້ານເສດຖະກິດ - ສັງຄົມ ຂຶ້ນເທື່ອລະກ້າວ ແນໃສ່ຂະຫຍາຍກຳລັງການຜະລິດ ແລະ ປັບປຸງໂຄງປົນສັງຄົມນິຍົມ. ແຕ່ວ່າຂາດຕົກບົກພ່ອງ ຕົ້ນຕໍຂອງພວກເຮົາ ແມ່ນອັດຕະວິໄສ, ຟ້າວຟັ່ງ, ບໍ່ຮູ້ສົມທົບລະຫວ່າງ ການດັດສ້າງກັບການກໍ່ສ້າງ, ຢາກລົບລ້າງ ບັນດາພາກສ່ວນ ເສດຖະກິດ ທີ່ບໍ່ເປັນສັງຄົມນິຍົມ ໂດຍທັນທີທັນໃດ ເຊັ່ນ: ໃນດ້ານອຸດສາຫະກຳ, ໄດ້ຟ້າວຟັ່ງໂອນເອົາບັນດາໂຮງງານ ທີ່ລະບອບເກົ່າປະໄວ້ ມາເປັນກຳມະສິດຂອງລັດ ໃນຂະນະທີ່ລັດ ບໍ່ທັນມີເງື່ອນໄຂພຽງພໍ ໃນການຄຸ້ມຄອງ ອັນພາໃຫ້ການຜະລິດຕົກຕ່ຳລົງ ໃນດ້ານການຄ້າ ປະກົດການເກືອດຫ້າມ ການຈາລະຈອນສິນຄ້າ ລະຫວ່າງ ທ້ອງຖິ່ນຕ່າງໆ ດ້ວຍກັນ ໄດ້ຂະຫຍາຍພໍສົມຄວນຢູ່ໃນຫຼາຍທ້ອງຖິ່ນ ອັນໄດ້ສົ່ງຜົນສະທ້ອນບໍ່ດີ ເຖິງການຜະລິດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ. ຍິ່ງໄປກວ່ານັ້ນ, ຢູ່ໃນບາງບ່ອນ ກໍ່ໃຊ້ມາດຕະການບໍລິຫານ, ອອກຄຳສັ່ງລົບລ້າງການຄ້າເອກະຊົນ. ໃນດ້ານກະສິກຳ ຢາກທັນປ່ຽນເປັນສະຫະກອນ ໃຫ້ສຳເລັດ ໂດຍທັນທີທັນໃດໂລດ ໂດຍຄິດວ່າເຮັດຄືແນວນັ້ນ ຈະພາໃຫ້ມີສັງຄົມນິຍົມ ຢ່າງໄວໆ, ບໍ່ໄດ້ເຮັດວຽກງານຂົນຂວາຍປະຊາຊົນ ດ້ວຍຄວາມໝັ້ນໝຽວທົນທານ, ໜັບຊາວນາໃຫ້ເຂົ້າສະຫະກອນ ໂດຍບໍ່ໄດ້ຄຳນຶງເຖິງລະດັບຄວາມຕື່ນຕົວຂອງເຂົາເຈົ້າ, ບໍ່ໄດ້ຄິດໄລ່ ເຖິງລະດັບການຄຸ້ມຄອງຂອງພະນັກງານ ແລະ ລະດັບຂະຫຍາຍຕົວ ຂອງກຳລັງການຜະລິດ ຢູ່ໃນແຕ່ລະບ່ອນ, ແຕ່ລະເວລາເປັນແນວໃດ. ດ້ວຍເຫດນັ້ນຢູ່ໃນບາງບ່ອນ ເມື່ອຈັດຕັ້ງສະຫະກອນຂຶ້ນແລ້ວ ການຜະລິດ ຈຶ່ງບໍ່ຂະຫຍາຍຕົວ, ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບການປົວແປງໃຫ້ດີຂຶ້ນ ແຕ່ຢູ່ໃນລະດັບຊັກຊ້າ.

ຈາກສະພາບການ ຄືດັ່ງກ່າວນັ້ນ, ກອງປະຊຸມໃຫຍ່ຂອງພັກ ຄັ້ງທີ IV ຂອງພັກ ປະຊາຊົນ ປະຕິວັດລາວ ຈຶ່ງໄດ້ຕົກລົງແນວທາງປ່ຽນແປງໃໝ່ ໂດຍມີຫຼັກການ ຊຶ່ງມີເນື້ອໃນຈົດໃຈໂດຍຫຍໍ້ ຄື: ລົບລ້າງເສດຖະກິດແຜນການຢ່າງລວມສູນ, ບໍລິຫານເກື້ອກູນຢ່າງຂາດຕົວ ແລ້ວນຳໃຊ້ຫຼາຍພາກສ່ວນເສດຖະກິດ, ກົນໄກເສດຖະກິດຕະຫຼາດ ທີ່ມີການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ໃນນີ້ສິ່ງສຳຄັນກວ່າໝູ່ແມ່ນການລົງທຶນ, ການດຳເນີນທຸລະກິດຕ້ອງຄິດໄລ່ປະສິດທິຜົນ.

ກອງປະຊຸມໃຫຍ່ຂອງພັກຄັ້ງນີ້ ຖືວ່າເປັນບາດລ້ຽວ ປະຫວັດສາດ ທີ່ສຳຄັນຍິ່ງໃນການວາງແນວທາງນະໂຍບາຍ ເພື່ອນຳພາປະເທດຊາດ ກ້າວຂຶ້ນສູ່ຄວາມຈະເລີນສີວິໄລ ຕາມທິດສັງຄົມນິຍົມ.

ສຳລັບຢູ່ ນະຄອນຫລວງວຽງຈັນ. ໃນໄລຍະດັ່ງກ່າວນັ້ນ, ກໍ່ແມ່ນຕົກຢູ່ໃນສະພາບແວດລ້ອມອັນດຽວກັນ ຄືກັບທົ່ວປະເທດ. ເມື່ອເປັນຄືແນວນັ້ນ ໃນກອງປະຊຸມໃຫຍ່ ຄັ້ງທີ I ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ຈຶ່ງໄດ້ກຳນົດທິດທາງນະໂຍບາຍ ແລະ ແຜນການພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ II ຂອງຕົນອອກຄື ແຕ່ປີ 1986 - 1990 ໂດຍໄດ້ເນັ້ນໜັກໃສ່ ຄືດັ່ງນີ້:

ຕັ້ງໜ້າແກ້ໄຂຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ວັດທະນະທຳ, ຮັບປະກັນດ້ານສະບຽງອາຫານ ໃຫ້ໄດ້ໂດຍພື້ນຖານ; ຍູ້ແຮງການຜະລິດກະສິກຳຮອບດ້ານ, ຕັ້ງໜ້າປັບປຸງບັນດາໂຮງງານ ອຸດສະຫະກຳ ແລະ ຫັດຖະກຳ ເພີ່ມທະວີວຽກງານ ຄົມມະນາຄົມ ຂົນສົ່ງ, ກໍ່ສ້າງພື້ນຖານໄປສະນີ, ເພີ່ມທະວີວຽກງານວັດທະນະທຳ - ສັງຄົມ, ສົມທົບແໜ້ນ ວຽກງານ ກໍ່ສ້າງຂະຫຍາຍເສດຖະກິດ, ວັດທະນະທຳ - ສັງຄົມ ກັບວຽກງານປ້ອງກັນຊາດ - ປ້ອງກັນ ຄວາມສະຫງົບ... ແລະ ໃຫ້ວາງຄາດໝາຍໃນແຕ່ລະດ້ານ ຄື:

- ດ້ານກະສິກຳ:

+ ຊຸກຍູ້ການຜະລິດກະສິກຳ ໃຫ້ມີການຂະຫຍາຍຕົວຢ່າງຮອບດ້ານ, ສູ້ຊົນເຮັດໃຫ້ ນະຄອນຫລວງວຽງຈັນ ກຸ້ມຕົນເອງ ທາງດ້ານສະບຽງອາຫານ, ຍູ້ແຮງການ ຜະລິດກະສິກຳ ທີ່ເປັນວັດຖຸດິບ ສະໜອງໃຫ້ໂຮງງານ ອຸດສະຫະກຳ ຈຳນວນໜຶ່ງ, ກໍ່ສ້າງພື້ນຖານວັດຖຸ - ເຕັກນິກ ກະສິກຳ ໃຫ້ສູງຂຶ້ນ ແລະ ໜັກແໜ້ນຕື່ມ, ປັບປຸງລະບົບການເກັບຊື້ ຜະລິດຕະພັນ ກະສິກຳ ໃຫ້ທົ່ວເຖິງ.

+ ຍອດຜະລິດຕະພັນ ກະສິກຳ ເພີ່ມຂຶ້ນແຕ່ລະປີ (1986 -1990). ສະເລ່ຍ 12,2%, ໃນ ປີ 1985 ຄາດຄະເນ 2.871 ລ້ານກີບ ແລະ ປີ 1990 ຄາດຄະເນ 5.105 ລ້ານກີບ.

+ ການຜະລິດເຂົ້າ:

ຮອດປີ 1990 ການຜະລິດເຂົ້າທັງໝົດສູ້ຊົນໃຫ້ໄດ້ 178.200 ໂຕນ, ທຽບໃສ່ປີ 1985 ເພີ່ມຂຶ້ນ 68.150 ໂຕນ, ເທົ່າກັບ 62%, ສະເລ່ຍເຂົ້າກິນ 417 ກິໂລ ຕໍ່ຄົນ.

ແຜນການ 5 ປີ ເທື່ອທີ I ຜົນຜະລິດ ເພີ່ມຂຶ້ນແຕ່ລະປີ 13,9%, ຜົນຜະລິດທັງໝົດ ແມ່ນ 422.210 ໂຕນ. ໃນແຜນການ 5 ປີເທື່ອທີ II ເພີ່ມຂຶ້ນແຕ່ລະປີສະເລ່ຍ 11,6%, ຜົນຜະລິດທັງໝົດໄດ້ 745.200 ໂຕນ, ທຽບກັບແຜນການ 5 ປີ ເທື່ອທີ I ເພີ່ມຂຶ້ນ 1,7 ເທື່ອ. ສ້າງຊົນລະປະທານໃໝ່ໃຫ້ໄດ້ 10 ແຫ່ງ.

ເນື້ອທີ່ນາ ໃນປີ 1985 ມີ 8.913 ຮ.ຕ, ສະມັດຕະພາບ 2,4 ໂຕນ/ຮຕ, ຜົນຜະລິດ 21.908 ໂຕນ. ເນື້ອທີ່ນາແຊງ ມີ 2.136 ຮ.ຕ ສະມັດຕະພາບ 2,7 ໂຕນ/ ຮຕ, ຜົນຜະລິດໄດ້ 5.944 ໂຕນ.

ຮອດປີ 1990 ມີເນື້ອທີ່ນາ ປີ 42.000 ຮຕ, ສະມັດຕະພາບ 2,5 ໂຕນ/ຮຕ, ຜົນຜະລິດ 117.600 ໂຕນ. ທຽບໃສ່ປີ 1985 ເນື້ອທີ່ນາປີ ເພີ່ມຂຶ້ນ 4.7 ເທື່ອ, ສະເລ່ຍຈ້ຽງຫວະເພີ່ມແຕ່ລະປີ 36,6%, ຜົນຜະລິດ ເພີ່ມຂຶ້ນ 5,3 ເທື່ອ, ສະເລ່ຍຈ້ຽງຫວະ ເພີ່ມແຕ່ລະປີ 40,0%. ເນື້ອທີ່ນາແຊງ ມີ 20.000 ຮຕ, ສະມັດຕະພາບ 3,0 ໂຕນ/ຮຕ, ຜົນຜະລິດ 60.000 ໂຕນ, ທຽບໃສ່ປີ 1985 ເນື້ອທີ່ນາແຊງ ເພີ່ມຂຶ້ນ 9,3 ເທື່ອ, ສຳລັບຈ້ຽງຫວະ ເພີ່ມແຕ່ລະປີ 56,4%, ຜົນຜະລິດ ເພີ່ມຂຶ້ນ 10 ເທື່ອ, ສະເລ່ຍຈ້ຽງຫວະ ເພີ່ມຂຶ້ນແຕ່ລະປີ 59,0%.

- ດ້ານອຸດສະຫະກຳ, ຫັດຖະກຳ ແລະ ປ່າໄມ້.

+ ປີ 1990 ເຄື່ອງມືກະເສດ ຈະມີ 59.700 ດວງ, ທຽບໃສ່ປີ 1985 ເພີ່ມຂຶ້ນ 43,3 ເທື່ອ, ສະເລ່ຍແຕ່ລະປີ ເພີ່ມຂຶ້ນ 40,4%.

+ ຄຸ, ບົວ ແລະ ໝໍ້ ມີ 8,500 ພັນໜ່ວຍ, ທຽບໃສ່ປີ 1985 ເພີ່ມຂຶ້ນ 2,7 ເທື່ອ, ສະເລ່ຍ ແຕ່ລະປີ ເພີ່ມຂຶ້ນ 22,8%.

+ ເຫລັກຕາປູ ມີ 1.040 ໂຕນ, ທຽບໃສ່ປີ 1985 ເພີ່ມຂຶ້ນ 4,7 ເທື່ອ, ສະເລ່ຍ ແຕ່ລະປີ ເພີ່ມຂຶ້ນ36,4%.

+ ໜາມໝາກຈັບ ມີ 22.850 ໂຄ້ງ, ທຽບໃສ່ປີ 1985 ເພີ່ມຂຶ້ນ 13 ເທື່ອ, ສະເລ່ຍແຕ່ລະ ປີ ເພີ່ມຂຶ້ນ 67,0%.

+ ດິນຈີ່ ມີ 10 ລ້ານກ້ອນ, ທຽບໃສ່ປີ 1985 ເພີ່ມຂຶ້ນ 2 ເທື່ອ ສະເລ່ຍແຕ່ລະປີ ເພີ່ມຂຶ້ນ 14,9 %.

+ ເກືອ ມີ 7.000 ໂຕນ ທຽບໃສ່ປີ 1985 ເພີ່ມຂຶ້ນ 40% ສະເລ່ຍແຕ່ລະປີ ເພີ່ມຂຶ້ນ 5%

+ ນ້ຳປາ, ນ້ຳສະອິວ ມີ 5.727 ຮ.ຕ.ລ, ທຽບໃສ່ປີ 1985 ເພີ່ມຂຶ້ນ 2,1 ເທື່ອ, ສະເລ່ຍ ແຕ່ລະປີ ເພີ່ມຂຶ້ນ 16,2%.

+ ປາແດກ ມີ 321 ໂຕນ, ທຽບໃສ່ປີ 1985 ເພີ່ມຂຶ້ນ 36,6%, ສະເລ່ຍແຕ່ລະປີ ເພີ່ມຂຶ້ນ 13,3%.

+ ແຜ່ນແພ ມີ 1,557 ລ້ານແມັດ, ທຽບໃສ່ປີ 1985 ເພີ່ມຂຶ້ນ 61% ສະເລ່ຍແຕ່ລະປີ ເພີ່ມຂຶ້ນ 10%.

+ ສືບຕໍ່ ກໍ່ສ້າງ ບັນດາໂຄງການ ຮ່ວມມື ທີ່ບໍ່ທັນສຳເລັດ ໃນປີ 1985 ແລະ ກໍ່ສ້າງໂຮງງານໃໝ່ ຈຳນວນໜຶ່ງ ເຊັ່ນ: ໂຮງງານ ຜະລິດແປ້ງເຂົ້າຈີ່, ໂຮງງານ ຫລອມເຫລັກເສດ, ໂຮງງານ ອິ້ວຝ້າຍ ຂະໜາດນ້ອຍ, ໂຮງງານ ຜະລິດເຂົ້າໜົມແຫ້ງ ຊະນິດຕ່າງໆ, ໂຮງງານ ບິດແປ້ງເຟືອງ, ແປ້ງໄມ້ປ່ອງ ເພື່ອຜະລິດເຈ້ຍ, ໂຮງງານ ບີບນ້ຳມັນພືດ, ໂຮງງານ ຜະລິດແກ້ວ ດ້ວຍແກ້ວເສດ, ໂຮງງານຜະລິດ ອຸປະກອນ ກໍ່ສ້າງເຄຫາສະຖານ, ໂຮງງານ ຜະລິດ ແລະ ສ້ອມແປງ ອຸປະກອນໄຟຟ້າ, ໂຮງງານ ນ້ຳຕານ ຂະໜາດນ້ອຍ,ໂຮງງານຜະລິດ ກະສອບປ່ານ ເຄື່ອງຫັດຖະກຳ ເຄື່ອງກົນຈັກ.

+ ດ້ານປ່າໄມ້: ຮອດປີ 1990 ການຂຸດຄົ້ນໄມ້ທ່ອນ ໃຫ້ໄດ້ 24,1 ພັນແມັດກ້ອນ, ສະເລ່ຍຈ້ຽງຫວະ ເພີ່ມແຕ່ລະປີ 10% ທຽບໃສ່ປີ 1985 ເພີ່ມຂຶ້ນ 1,6 ເທື່ອ. ໄມ້ເລື່ອຍ ໃຫ້ໄດ້ 9,6 ພັນແມັດກ້ອນ ສະເລ່ຍ ຈ້ຽງຫວະ ເພີ່ມແຕ່ລະປີ 10% ທຽບໃສ່ປີ 1985 ເພີ່ມຂຶ້ນ 1,6 ເທື່ອ.

- ດ້ານການຄ້າ:

+ ໃນແຜນການ: 5 ປີ ເທື່ອທີ II ບໍລິມາດສິນຄ້າ ຈາລະຈອນຂາຍຍ່ອຍ ເພີ່ມຂຶ້ນແຕ່ລະປີສະເລ່ຍ 11,7%, ຄາດຄະເນຮອດປີ 1990 ມູນຄ່າທັງໝົດ 2.396 ລ້ານກີບ, ທຽບໃສ່ປີ 1985 ເພີ່ມຂຶ້ນ 1,7ເທື່ອ ໃນນັ້ນ:

* ສິນຄ້າສະບຽງອາຫານ 1.120 ລ້ານກີບ, ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 13,6% ທຽບໃສ່ປີ 1985 ເພີ່ມຂຶ້ນ 1,8 ເທື່ອ.

* ສິນຄ້າອຸດສະຫະກຳ 1.276 ລ້ານກີບ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 10,2% ທຽບໃສ່ປີ 1985 ເພີ່ມຂຶ້ນ 1,6 ເທື່ອ.

+ ດ້ານການຄ້າຕ່າງປະເທດ.

* ຂາອອກ: ປີ 1990 ຍອດມູນຄ່າສິ່ງອອກ ທັງໝົດ 3,3 ລ້ານໂດລາ, ທຽບໃສ່ປີ 1985 ເພີ່ມຂຶ້ນ 2,2 ເທື່ອ ເພີ່ມຂຶ້ນສະເລ່ຍ ແຕ່ລະປີ 19,0%.

* ຂາເຂົ້າ: ມູນຄ່າສິນຄ້າຂາເຂົ້າ ໃນປີ 1990 ຄາດຄະເນ ເຖິງ 1,213 ລ້ານໂດລາ ທຽບໃສ່ປີ 1985 ເພີ່ມຂຶ້ນ 1,9 ເທື່ອ ເພີ່ມຂຶ້ນສະເລ່ຍແຕ່ລະປີ 14,5%.

- ດ້ານການເງິນ:

+ ປີ 1990 ຄາດຄະເນລາຍຮັບງົບປະມານ 1.650,9 ລ້ານກີບ, ທຽບໃສ່ປີ 1985 ເພີ່ມຂຶ້ນ 2,1 ເທື່ອ, ສະເລ່ຍຈັ່ງຫວະ ເພີ່ມແຕ່ລະປີ 16,3%. ໃນນັ້ນ, ລາຍຮັບຈາກເສດຖະກິດຂອງລັດ 1.136,5 ລ້ານກີບ, ກວມອັດຕາສ່ວນ 68,5% ທຽບໃສ່ປີ 1985 ເພີ່ມຂຶ້ນ 3,2 ເທື່ອ ສະເລ່ຍ ຈັ່ງຫວະ ເພີ່ມແຕ່ລະປີ 26,8% ລາຍຮັບຈາກ ພາສີ ລວມໝູ່ ເອກະຊົນ 482,7 ລ້ານກີບ, ກວມອັດຕາສ່ວນ 29,1% ທຽບໃສ່ປີ 1985 ເພີ່ມຂຶ້ນ 1,2 ເທື່ອ, ສະເລ່ຍຈັ່ງຫວະ ເພີ່ມແຕ່ລະປີ 4,5%. ນອກນີ້, ແມ່ນລາຍຮັບອື່ນໆ . . .

- ທະນາຄານ:

+ ປີ 1990 ຄາດຄະເນລາຍຮັບ ເງິນສົດ 5.568 ລ້ານກີບ ທຽບໃສ່ປີ 1985 ເພີ່ມຂຶ້ນ 3,7 ເທື່ອ ສະເລ່ຍຈັ່ງຫວະ ເພີ່ມຂຶ້ນແຕ່ລະປີ 30%. ໃນນັ້ນ ລາຍຮັບ ຈາກການຂາຍເຄື່ອງ 3.008 ລ້ານກີບ, ຮັບຈາກການຮັບໃຊ້ 928 ລ້ານກີບ, ຮັບຈາກການເງິນ 1.101 ລ້ານກີບ, ຮັບຈາກທະນາຄານ 531 ລ້ານກີບ.

+ ລາຍຈ່າຍເງິນສົດ ປີ 1990 ຄາດຄະເນ 4.455 ກີບ, ທຽບໃສ່ປີ 1985 ເພີ່ມຂຶ້ນ 3,7 ເທື່ອ, ສະເລ່ຍຈັ່ງຫວະເພີ່ມແຕ່ລະປີ 30% ໃນນັ້ນ ຈ່າຍງົບປະມານ 892 ລ້ານກີບ, ຈ່າຍວິສາຫະກິດ 1.262 ລ້ານກີບ, ຈ່າຍເກັບຊື້ 1.002 ລ້ານກີບ, ຈ່າຍທະນາຄານ 1.299 ລ້ານກີບ.

- ດ້ານຄົມມະນາຄົມຂົນສົ່ງໄປສະນີ:

+ ປູຢາງ ເສັ້ນທາງຊັ້ນ 3 ໃຫ້ໄດ້ 50 ກມ, ລະດັບຊັ້ນ 4 ແລະ 5 ໃຫ້ໄດ້ 163 ກມ.

+ ສ້ອມແປງ ທາງຂະໜາດກາງ, ທາງນອກຕົວເມືອງ ດ້ວຍດິນແດງ 68,5 ກມ, ພາຍໃນຕົວເມືອງ ນະຄອນຫລວງ 20 ກມ, ສ້ອມແປງຕາບຢາງ 25 ກມ, ປ້ອງກັນຕະຝັ່ງເຈື່ອນລຽບແຄມຂອງ 570 ມ, ຄູກັນນ້ຳ ບ້ານ ໝາກນາວ ຫາ ດົງກະລຶມ, ບ້ານ ໂດນ 40 ກມ.

- ດ້ານການສຶກສາ:

ນະຄອນຫລວງວຽງຈັນ ໄດ້ປະກາດລົບລ້າງ ການກືກໜັງສື ແຕ່ປີ 1976, ຕາໜ່າງການສຶກສາ ໄດ້ມີການຂະຫຍາຍຕົວຕື່ມເປັນກ້າວໆ ໃນແຜນການ 5 ປີ ເທື່ອທີ II (1986 - 1990).

+ ຈຳນວນ ນັກຮຽນ ອະນຸບານ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 4,5%.
+ ຈຳນວນ ນັກຮຽນ ປະຖົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 3,2%.
+ ຈຳນວນ ນັກຮຽນ ມັດທະຍົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 6,1%.
+ ຈຳນວນ ນັກຮຽນ ອຸດົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 0,1%.
+ ຈຳນວນ ຄູສອນ ອະນຸບານ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 3,4%.

+ ຈຳນວນ ຄູສອນ ປະຖົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 3,1%.

+ ຈຳນວນ ຄູສອນ ມັດທະຍົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 6,0%.

+ ຈຳນວນ ຄູສອນ ອຸດົມ ເພີ່ມຂຶ້ນແຕ່ລະປີ ສະເລ່ຍ 1,4%.

- ດ້ານສາທາລະນະສຸກ:

ແຜນການ 5 ປີ ເທື່ອທີ II ຈັ່ງຫວະເພີ່ມສະເລ່ຍ:

+ ຈຳນວນ ແພດ ຊັ້ນສູງ 19%, ຊັ້ນກາງ 14,1%, ຊັ້ນຕົ້ນ 16,3%.

+ ຈຳນວນ ໝໍ ຄົນເຈັບ 6,8%.

+ ຈຳນວນ ແພດ ຊັ້ນສູງ ມີ 124 ຄົນ ທຽບໃສ່ປີ 1985 ເພີ່ມຂຶ້ນ 2,4 ເທື່ອ.

+ ຈຳນວນ ແພດ ຊັ້ນກາງ ມີ 500 ຄົນ ທຽບໃສ່ປີ 1985 ເພີ່ມຂຶ້ນ 1,03 ເທື່ອ.

+ ຈຳນວນ ແພດ ຊັ້ນຕົ້ນ ມີ 1.507 ຄົນ ທຽບໃສ່ປີ 1985 ເພີ່ມຂຶ້ນ 2 ເທື່ອ.

+ ຈຳນວນ ໝໍ ຄົນເຈັບ ໂຮງໝໍ ນະຄອນຫລວງ ມີ 250 ໝໍ ທຽບໃສ່ປີ 1985 ເພີ່ມຂຶ້ນ 25%.

+ ຈຳນວນ ໝໍ ຄົນເຈັບ ໂຮງໝໍ ເມືອງ ມີ 350 ໝໍ, ທຽບໃສ່ປີ 1985 ເພີ່ມຂຶ້ນ 110%.

ໄປຄຽງຄູ່ກັບການພັດທະນາເສດຖະກິດ - ສັງຄົມ ຮອດປີ 1990, ຄະນະພັກ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ ຍັງໄດ້ວາງຄາດໝາຍ ໃນການກໍ່ສ້າງພື້ນຖານຂັ້ນຕາແສງ, ຂະແໜງການ, ບໍລິສັດ, ກົມກອງທະຫານ, ຕຳຫລວດ, ໂຮງຈັກ, ໂຮງງານ ຂະໜາດກາງ, ໂຮງຮຽນອຸດົມ ໃຫ້ມີໜ່ວຍພັກ, ບ້ານ, ໜ່ວຍສະຫະກອນ, ໂຮງຮຽນ ມັດທະຍົມ, ໂຮງງານ ຂະໜາດນ້ອຍ, ໂຮງໝໍ ແມ່ນຕ້ອງມີໜ່ວຍພັກນຳພາ. ນອກຈາກນັ້ນ, ກໍ່ຕ້ອງມີ ສະມາຊິກພັກນຳພາໂດຍພື້ນຖານ. ໃນປັດຈຸບັນນີ້ ນະຄອນຫລວງວຽງຈັນ ຊຶ່ງເປັນໃຈກາງທາງການເມືອງ, ເສດຖະກິດ, ວັດທະນະທຳ ຂອງປະເທດຊາດ ພວມໄດ້ຮັບການເອົາໃຈໃສ່ ໃນດ້ານການກໍ່ສ້າງ ຢ່າງຮອບດ້ານ. ທັງນີ້ກໍ່ເພື່ອເສີມຂະຫຍາຍຢ່າງຕັ້ງໜ້າ ການນຳພາຂອງອຳນາດການປົກຄອງ, ເພາະມັນມີຄວາມໝາຍສຳຄັນຍິ່ງ ຕໍ່ການຂະຫຍາຍໝາກຜົນຂອງການປະຕິວັດ ທັງມີຄວາມໝາຍ ໃນການປົກປັກຮັກສາ, ປັບປຸງລະບົບອຳນາດການປົກຄອງ, ເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າ ແນໃສ່ເພື່ອສ້າງ ນະຄອນຫລວງວຽງຈັນ ກ້າວຂຶ້ນສຳເລັດ ແຜນພັດທະນາ ປະເທດຊາດຕາມທິດທາງຂອງພັກ ເປັນແຕ່ລະໄລຍະ ປະຫວັດສາດ ຢ່າງຢັ້ງຢືນ.

ສັງລວມໄດ້ວ່າ: ເຖິງວ່າສະພາບແວດລ້ອມ ສາກົນ ແລະ ພາກພື້ນ ຈະສົ່ງຜົນກະທົບທາງລົບເປັນສ່ວນຫລາຍ, ແຕ່ຍ້ອນມີພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ໄດ້ເປັນຈິດໜຶ່ງໃຈດຽວກັນ ຕີຕ້ານ, ຜ່ານຜ່າ ສາມາດ ເຮັດໃຫ້ປະເທດຊາດ ກໍຄືນະຄອນຫລວງວຽງຈັນ ມີຄວາມໝັ້ນຄົງ ໂດຍພື້ນຖານ, ເສດຖະກິດ - ສັງຄົມ ກ້າວໜ້າ ເພີ່ມຂຶ້ນຢ່າງ ຈະແຈ້ງ.

ຂ. ກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ນະຄອນຫລວງວຽງຈັນ (31/ 3 - 2/4/ 1994).



ກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ນະຄອນຫລວງວຽງຈັນ

ໃນວັນທີ 31/3 - 2/4/1994, ອົງຄະນະພັກ ນະຄອນຫລວງວຽງຈັນ ໄດ້ໄຂກອງປະຊຸມໃຫຍ່ ສະໄໝທີ II ຂຶ້ນຢ່າງເປັນທາງການ, ພາຍໃຕ້ການເປັນປະທານຂອງ ທ່ານ ບຸນຍັງ ວໍລະຈິດ, ກຳມະການສູນກາງພັກ ກອງປະຊຸມໄດ້ປຶກສາຫາລື ກ່ຽວກັບການສືບຕໍ່ຫັນເອົານະໂຍບາຍປ່ຽນແປງໃໝ່ ທີ່ກອງປະຊຸມໃຫຍ່ ສະໄໝທີ IV ຂອງພັກ ໄດ້ຮັບຮອງເອົາແລ້ວ ຫັນມາເປັນທິດທາງແຜນການລະອຽດຕື່ມຢູ່ ນະຄອນຫລວງວຽງຈັນ ໃນແຕ່ລະຂົງເຂດ ເຊັ່ນ: ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ - ສັງຄົມ, ວຽກງານພົວພັນກັບຕ່າງປະເທດ ແລະ ວຽກງານກໍ່ສ້າງພັກ - ກໍ່ສ້າງພະນັກງານ.

ຜ່ານການຈັດຕັ້ງປະຕິບັດ ນະໂຍບາຍປ່ຽນແປງໃໝ່ ທີ່ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກວາງອອກ ແລະ ອົງຄະນະພັກ ນະຄອນຫຼວງວຽງຈັນ ສະໄໝທີ II ໄດ້ຮັບຮອງເອົານັ້ນ, ໄດ້

ເຮັດໃຫ້ ທຸກຂົງເຂດວຽກງານມີການ ພັດທະນາດີຂຶ້ນ ທາງດ້ານປະລິມານ ແລະ ຄຸນນະພາບ.

1. ຂົງເຂດ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

ເຮັດໃຫ້ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຕິດພັນແໜ້ນກັບການກໍ່ສ້າງ ຮາກຖານພັດທະນາໂຕເມືອງ ແລະ ຊົນນະບົດ, ກວດການປັບປຸງຮາກຖານ, ຈຳກັດປະກົດການ ຫຍໍ້ທໍ້ໃນສັງຄົມ ແລະ ການປັບປຸງບູລະນະ ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ເຂົ້າ ເປັນເນື້ອໃນດຽວກັນ ແລະ ຖືເອົາວຽກງານເຫຼົ່ານີ້ ເປັນເນື້ອໃນ ສຶກສາອົບຮົມ ດ້ານແນວຄິດ ການເມືອງ, ຍົກສູງ ສະຕິລະບຽບວິໄນ, ຄວາມຮັບຜິດຊອບ ປະຕິບັດໜ້າທີ່ປ້ອງກັນຊາດ - ປ້ອງ ກັນຄວາມສະຫງົບ, ໃນການປັບປຸງການກໍ່ສ້າງ ກອງຫຼອມ, ປກສ ບ້ານ, ປຸກລະດົມສິ່ງເສີມຊາວ ໜຸ່ມ ໄປເປັນທະຫານ. ອັນເຮັດໃຫ້ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບເຂັ້ມແຂງມີ ຄວາມສາມາດພຽງພໍ ໃນການຮັກສາຄວາມສະຫງົບ ການເມືອງ ແລະ ຄວາມເປັນລະບຽບຮຽບ ຮ້ອຍ ດ້ານສັງຄົມ ນັບມື້ນັບໜັກແໜ້ນ ແລະ ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ໄດ້ກາຍເປັນຂອງປະຊາຊົນ ເທື່ອລະກ້າວ ນັ້ນຄືການປ່ຽນແປງໃໝ່ທີ່ສຸດ ແລະ ເປັນບາດລ້ຽວ ອັນສຳຄັນທີ່ສຸດ. ຜ່ານການປະຕິບັດ ກົນໄກເສດຖະກິດຕະຫຼາດ ອັນພາໃຫ້ ນະຄອນຫລວງວຽງ ຈັນ ມີຄວາມສະຫງົບທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍ ດ້ານສັງຄົມ ທີ່ນັບມື້ ນັບໜັກແໜ້ນຂຶ້ນເລື້ອຍໆ ດັ່ງເຫັນຢູ່ໃນປະຈຸບັນ.

2. ໃນຂົງເຂດເສດຖະກິດ.

ໃນໄລຍະປະຕິບັດ ນະໂຍບາຍ ປ່ຽນແປງໃໝ່ ດ້ານກົນໄກ ເສດຖະກິດຕະຫຼາດ ເຮັດໃຫ້ ເສດຖະກິດໃນ ນະຄອນຫລວງວຽງຈັນ ຂະຫຍາຍຕົວດ້ວຍຈັງຫວະໄວຂຶ້ນ. ໃນປີ 1995 -1999, ຍອດຜະລິດຕະພັນພາຍໃນ ເພີ່ມຂຶ້ນ 9,15 % /ປີ, ລາຍໄດ້ສະເລ່ຍຫົວຄົນ ບັນລຸ 755 ໂດລາ/ ຄົນ/ປີ, ທຽບໃສ່ປີ 1994 ເພີ່ມຂຶ້ນ 390 ໂດລາ/ຄົນ.

- ດ້ານກະສິກຳ.

ການຜະລິດກະສິກຳ ຮອບດ້ານ ມີຈັງຫວະໄວສົມຄວນ ເນື້ອທີ່ປູກເຂົ້າ 65.226 ເຮັກຕາ ເພີ່ມຂຶ້ນ 13.975 ເຮັກຕາ, ເນື້ອທີ່ນາແຊງ 16.732 ເຮັກຕາ ເພີ່ມຂຶ້ນ 12.220 ເຮັກຕາ, ຜະ ລິດເຂົ້າ ໄດ້ທັງໝົດ 227 - 346 ໂຕນ, ສະເລ່ຍ ໃສ່ຫົວຄົນບັນລຸ 380 ກິໂລ, ມີ 655 ຄອບຄົວ ເຮັດກະເສດສຸມ.

* ພື້ນຖານໂຄງລ່າງກະສິກຳ: ຊົນລະປະທານ ມີ 88 ແຫ່ງ, ເພີ່ມຂຶ້ນ 39,7 %, ທຽບໃສ່ ປີ 1994 - 1995, ອ່າງເກັບນ້ຳ 6 ແຫ່ງ, ຮັບປະກັນເອົານ້ຳເຂົ້ານາ ໃນເນື້ອທີ່ 32.000 ເຮັກຕາ, 18.000 ເຮັກຕາ ສຳລັບນາແຊງ.

* ເນື້ອທີ່ປູກໄມ້ກິນໜາກ ກໍ່ມີການຂະຫຍາຍກວ້າງອອກ, ເນື້ອທີ່ປູກຜັກ 6.792 ເຮັກຕາ, ຜົນຜະລິດບັນລຸໄດ້ 69.826 ໂຕນ/ປີ, ຕອບສະໜອງຄວາມຕ້ອງການຂອງຕະຫຼາດໄດ້ໂດຍພື້ນຖານ.

- ດ້ານການລ້ຽງສັດ:

ການລ້ຽງສັດຂອງຄອບຄົວຂະຫຍາຍຕົວໄວ, ມີຟາມລ້ຽງໄກ່ພັນຊີ້, ພັນໄຂ່ 99 ແຫ່ງ, ຜະລິດໄຂ່ ໄດ້ແຕ່ລະວັນ 200.000 ໜ່ວຍ, ໃນປີ 1999 ຜະລິດຊີ້ນ ໄດ້ 15.190 ໂຕນ, ທຽບໃສ່ປີ 1994 ເພີ່ມຂຶ້ນ 5.018 ໂຕນ.

- ດ້ານປ່າໄມ້:

ໄດ້ມອບດິນ, ມອບປ່າ ຈັດສັນອາຊີບ ແລະ ຕັ້ງພູມລຳເນົາຄົງທີ່ໃຫ້ປະຊາຊົນ, ສຶກສາອົບຮົມໃຫ້ປະຊາຊົນ ຮັກສາດິນ, ປ່າໄມ້, ແຫຼ່ງນ້ຳ, ສິ່ງແວດລ້ອມ ໄດ້ 200 ບ້ານໃນ 7 ເຂດເມືອງ, ກວມເອົາ 95,24 % ຂອງຈຳນວນບ້ານເປົ້າໝາຍ, ປູກຕົ້ນໄມ້ ໄດ້ 654 ເຮັກຕາ, ຂຸດຄົ້ນຂັບພະຍາກອນປ່າໄມ້ ເຂົ້າງົບປະມານ ບັນລຸ 789 ຕື້ກີບ.

- ດ້ານອຸດສະຫະກຳ - ຫັດຖະກຳ:

ໄດ້ຊຸກຍູ້ໂຮງງານໃຫຍ່ ແລະ ນ້ອຍທີ່ມີຢູ່ 1.257 ແຫ່ງທັງຂອງລັດ, ຂອງຄອບຄົວ ແລະ ກຸ່ມຄອບຄົວ, ນັບທັງໂຮງງານທີ່ຕ່າງປະເທດລົງທຶນ, ຜະລິດເປັນສິນຄ້າໃຫ້ຫຼາຍຂຶ້ນ. ຜະລິດຕະພັນລວມຍອດຂອງອຸດສາຫະກຳ ແລະ ຫັດຖະກຳ ເພີ່ມຂຶ້ນ 24 ເທື່ອ ທຽບກັບປີ 1994, ຂະຫຍາຍຕາໜ່າງໄຟຟ້າ ໄປສູ່ຊຸມນະບົດ ໄດ້ 414 ບ້ານ, ກວມເອົາ 84,5 % ຂອງຈຳນວນ ບ້ານທັງໝົດ.

3. ການຄ້າ ແລະ ທ່ອງທ່ຽວ.

ຕາໜ່າງ ການຄ້າ ບໍລິການ ຂະຫຍາຍກວ້າງອອກ, ມີຮ້ານບໍລິການ ທີ່ໄດ້ຂຶ້ນທະບຽນ 5.415 ແຫ່ງ, ຍອດຜະລິດຕະພັນການຄ້າ ແລະ ບໍລິການ ເພີ່ມຂຶ້ນ 22 ເທື່ອ ທຽບກັບປີ 1994, ໄດ້ປັບປຸງຄືນບໍລິສັດ ຂາເຂົ້າ - ຂາອອກ, ບໍລິສັດ ສະບຽງຂອງລັດ, ກວດກາ ແລະ ຄຸ້ມຄອງຕະຫຼາດ, ຮ້ານຄ້າ, ຮ້ານບໍລິການ ແລະ ການຄ້າຂາຍແມ່ນໃຫ້ເຄື່ອນໄຫວຖືກກົດໝາຍ, ຈຳກັດການນຳເຂົ້າ ແລະ ສິ່ງອອກສິນຄ້າເຖື່ອນ.

ການທ່ອງທ່ຽວ: ໄດ້ກໍ່ສ້າງ ແລະ ບູລະນະສະຖານທີ່ທ່ອງທ່ຽວສຳລັບການພັກຜ່ອນ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານບັນເທີງ, ຮັກສາເອກະລັກຮີດຄອງປະເພນີອັນຈົບງາມຂອງຊາດໃຫ້ຍືນຍົງ.

4. ການຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ.

ໄດ້ສ້ອມແປງ ບູລະນະ ເສັ້ນທາງ, ຮ່ອງລະບາຍນ້ຳໃນເທດສະບານ ເມືອງ, ຊົນນະບົດ, ເປັນຕົ້ນ ແມ່ນເສັ້ນທາງ 7 ເສັ້ນໃນເທດສະບານ ນະຄອນຫຼວງວຽງຈັນ. ຂະຫຍາຍເສັ້ນທາງໃຫຍ່ ໄດ້ 104 ກິໂລແມັດ; ປູຢາງ 23 ກິໂລແມັດ; ສ້ອມແປງເສັ້ນທາງ ໄດ້ 8.844 ກິໂລແມັດ; ສ້ອມແປງຮ່ອງລະບາຍນ້ຳ ໄດ້ 19.831 ກິໂລແມັດ; ຈັດສັນລະບຽບການສັນຈອນຂອງລົດລາພາຫະນະ, ຄຸ້ມຄອງການນຳໃຊ້ທາງ, ປັບປຸງ ແລະ ຂະຫຍາຍເສັ້ນທາງລົດເມ, ໂທລະຄົມມະນາຄົມ, ນ້ຳປະປາ ອອກສູ່ຊານເມືອງ ແລະ ຊົນນະບົດ ໃຫ້ໄດ້ຮັບຄວາມສະດວກສະບາຍຂຶ້ນ ໃນດ້ານສາທາລະນຸປະໂພກ ແລະ ສາທະລະນຸປະການ ເຮັດໃຫ້ ນະຄອນຫລວງວຽງຈັນ ເລີ່ມເປັນເມືອງທັນສະໄໝ.

5. ດ້ານການເງິນ, ທະນາຄານ.

ໄດ້ປະຕິບັດຫຼັກການ ການເງິນລວມສູນງົບປະມານ, ປັບປຸງກົນໄກ ແລະ ນະໂຍບາຍການເງິນ ໃຫ້ສອດຄ່ອງກັບເສດຖະກິດຕະຫຼາດ. ສະນັ້ນ, ການເງິນ ໃນສົກປີ 1998 - 1999 ສາມາດສ້າງລາຍຮັບເຂົ້າງົບປະມານ ໄດ້ 18.565 ຕື້ກີບ, ເພີ່ມຂຶ້ນ 236 ທຽບໃສ່ປີ 1994 -1995; ໄດ້ສຳຫລວດຈັດສັນທີ່ດິນຄືນໃໝ່, ອອກໃບຕາດິນຖາວອນໃນ 4 ຕົວເມືອງຄື: ເມືອງ ສີສັດຕະນາກ, ເມືອງ ໄຊເສດຖາ, ເມືອງ ຈັນທະບູລີ ແລະ ເມືອງ ໄຊທານີ ເຮັດໃຫ້ປະຊາຊົນສ່ວນໜຶ່ງທີ່ຢູ່ໃນ 4 ຕົວເມືອງ ນີ້ມີໃບຕາດິນຢ່າງຖາວອນ.

6. ການພັດທະນາຊົນນະບົດ.

ນະຄອນຫລວງວຽງຈັນ ໄດ້ສຸມທຶນຮອນກ້ອນໜຶ່ງ ເຂົ້າໃສ່ການພັດທະນາ ສາມເຂດຈຸດສຸມ ຄື: ຫ້ວຍລຽບ, ສົບໄຊ ແລະ ໂຄກເຜິ້ງ. ລວມມີ 30 ບ້ານ, ມີ 27 ໂຄງການ, ມູນຄ່າ 3,07 ຕື້ກີບ. ສຳລັບການສ້າງແປງໂຮງຮຽນ, ໂຮງໝໍ, ສຸກສາລາ, ຈັດຫານ້ຳສະອາດ, ຂະຫຍາຍຕາໜ່າງໄຟຟ້າໃຫ້ປະຊາຊົນ 30 ບ້ານ ແລະ ໃຫ້ບ້ານເຫຼົ່ານີ້ມີໂສມໜ້າໃໝ່, ຊີວິດການເປັນຢູ່ ດ້ານວັດຖຸ ແລະ ຈິດໃຈ ໄດ້ຮັບການປົວແປງໃຫ້ດີຂຶ້ນ, ຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ກໍ່ໜັກແໜ້ນ ແລະ ດ້ານການຮ່ວມມືກັບພັກ ແລະ ລັດຖະບານໃນການປົກປັກຮັກສາ ແລະ ສ້າງສາຢູ່ໃນທ້ອງຖິ່ນຂອງຕົນກໍ່ທ້າວທັນກວ່າເກົ່າ.

7. ການພົວພັນກັບຕ່າງປະເທດ.

ແມ່ນໄດ້ຮັບການປັບປຸງໃໝ່ ໃນ 5 ປີ ປະຕິບັດແນວທາງປ່ຽນແປງໃໝ່, ທັນຈາກການຄຸ້ມຄອງແບບເກື້ອກູນລວມສູນ ອາດຍາສິດໄປສູ່ກົນໄກ ເສດຖະກິດຕະຫຼາດ, ການພົວພັນ ຂອງນະຄອນຫລວງວຽງຈັນ ກັບຕ່າງປະເທດ ກໍ່ກ້າວໄປສູ່ວັນໃໝ່ ເຮັດໃຫ້ການຊ່ວຍເຫຼືອລ້າ ແລະ

ການກູ້ຢືມຈາກຕ່າງປະເທດ ໄດ້ເພີ່ມຂຶ້ນຢ່າງຈະແຈ້ງ ຊຶ່ງມີຍອດມູນຄ່າທັງໝົດ 39.663.800 ໂດລາ. ໃນນັ້ນທຶນກູ້ຢືມ ມີ 24.135.000 ໂດລາ, ຕ່າງປະເທດເຂົ້າມາລົງທຶນ ມີ 236 ໂຄງການ, ມູນຄ່າ 1.840.363.000 ໂດລາ, ກວມເອົາ 91,25 % ຂອງມູນຄ່າລົງທຶນທັງໝົດ.

8. ໃນຂົງເຂດວັດທະນະທຳ - ສັງຄົມ.

- ດ້ານການສຶກສາ: ໄດ້ມີການປ່ຽນແປງໃໝ່ ທີ່ມີລັກສະນະເປັນບາດລ້ຽວ, ມີລະບົບໂຮງຮຽນ ສາມັນສຶກສາ ທັງໝົດ 875 ແຫ່ງ, ທຽບໃສ່ປີ 1994 ເພີ່ມຂຶ້ນ 345 ແຫ່ງ, ມີນັກຮຽນ 159.564 ຄົນ, ເພີ່ມຂຶ້ນ 23.520 ຄົນ, ຄູສອນ 6.436 ຄົນ ເພີ່ມຂຶ້ນ 771 ຄົນ, ເດັກເຖິງກະສຽນເຂົ້າຮຽນ ໄດ້ເຂົ້າໂຮງຮຽນ 98,5 % ທຽບໃສ່ປີ 1994 ເພີ່ມຂຶ້ນ 7,1 % ການສຶກສາ ນອກລະບົບ ໄດ້ຮັບການປັບປຸງ, ສຳເລັດການລົບລ້າງການກຶກໜັງສື ໃຫ້ປະຊາຊົນ ໃນ 9 ຕົວເມືອງ, ຍົກລະດັບການສຶກສາໃຫ້ພະນັກງານ ແລະ ປະຊາຊົນໃນ 8 ຕົວເມືອງສຳເລັດລື່ນຄາດໝາຍ 32,0 % ປະຊາຊົນ ໄດ້ປະກອບສ່ວນເຂົ້າໃນການບູລະນະ ສ້ອມແປງໂຮງງານ ດ້ວຍແຮງງານ ໄລ່ເປັນມູນຄ່າມີເຖິງ 1,21 ຕື້ກີບ.

- ດ້ານສາທາລະນະສຸກ: ໄປພ້ອມກັບການປັບປຸງ ຄຸນນະພາບ ຂອງວຽກງານສາທາລະນະສຸກ (ລະບອບການກວດພະຍາດ, ການປິ່ນປົວ, ຮັກສາສຸຂະພາບ, ການອົບຮົມຈັນຍາບັນຂອງແພດໝໍປະຕິວັດ) ກໍ່ມີການຂະຫຍາຍຕາໜ່າງສາທາລະນະສຸກ (ສຸກສາລາ, ຫ້ອງກວດພະຍາດ) ແລະ ອະນຸຍາດໃຫ້ເອກະຊົນຕັ້ງຄະລິນິກສ່ວນຕົວໄດ້ ອັນເຮັດໃຫ້ສະຖານທີ່ປິ່ນປົວ ແລະ ກວດພະຍາດເພີ່ມຂຶ້ນ, ຊຶ່ງມີທັງລະບົບແພດແຜນໃໝ່ ແລະ ແຜນບູຮານ, ມີທັງສະຖານທີ່ ບຳບັດ ແລະ ຫັດກາຍບໍລິຫານ, ສຸຂະພາບຂອງຄົນແຂງແຮງຂຶ້ນ, ການຕາຍຍ້ອນພະຍາດຊຳເຮື້ອລົດລົງ 3,4 % ອາຍຸຄົນຍືນຂຶ້ນສະເລ່ຍຜູ້ຊາຍເພີ່ມຂຶ້ນ 59 ປີ, ຍິງ 61 ປີ.

- ວຽກງານຖະແຫຼງຂ່າວ - ວັດທະນະທຳ: ຄະນະພັກ, ອຳນາດການປົກຄອງ ນະຄອນຫຼວງວຽງຈັນ ໄດ້ນຳໃຊ້ຫຼາຍພາຫະນະ ເຊັ່ນ: ວິທະຍຸກະຈາຍສຽງ, ໂທລະພາບ, ໜັງສືພິມ, ຈັດຕັ້ງ ການປະຖະກະຖາ, ຈັດຊຸດອົບຮົມການເມືອງໃນໄລຍະສັ້ນ ແລະ ໄລຍະຍາວ ເຂົ້າໃນການເຜີຍແຜ່ແນວທາງຂອງພັກ, ແຜນພັດທະນາຂອງລັດ, ປຸກລະດົມຊົນຂວາຍ ແລະ ຈັດຕັ້ງມະຫາຊົນປະຕິບັດສອງໜ້າທີ່ຍຸດທະສາດ, ສ້າງແບບແຜນດຳລົງຊີວິດທີ່ປອດໃສ, ເຂັ້ມແຂງເຮັດໃຫ້ຊີວິດສັງຄົມ ນະຄອນຫຼວງວຽງຈັນ ສົດໃສ່ຂຶ້ນ ແລະ ຈຳກັດໄດ້ສິ່ງຫຍໍ້ທໍ້ ວັດທະນະທຳ ຮີດຄອງປະເພນີທີ່ຈີບງາມ ຊຶ່ງເປັນມູນເຊື້ອຂອງຊາດ, ຂອງຊາວນະຄອນຫລວງວຽງຈັນ ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຂຶ້ນສູ່ຄຸນນະພາບໃໝ່, ປະຊາຊົນບັນດາຊັ້ນຄົນ ສາມັກຄີກັນເປັນ

ປົກແຜ່ນຢູ່ອ້ອມຂ້າງພັກ ແລະ ພາກັນສູ້ຊົນນຳເອົາ ນະຄອນ ກ້າວໄປສູ່ການປ່ຽນແປງໃໝ່ ຮອບດ້ານຢ່າງບໍ່ຢຸດຢັ້ງ.

9. ຂົງເຂດລະບົບການເມືອງ.

ລະບົບການເມືອງກໍ່ມີການປ່ຽນແປງ ເຊັ່ນ: ວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ, ວຽກງານຈັດຕັ້ງມະຫາຊົນ, ອຳນາດການປົກຄອງ, ຍຸດຕິທຳນິຕິບັນຍັດ, ໂຄສະນາອົບຮົມ, ວຽກງານກວດກາ ໄດ້ກໍ່ສ້າງປັບປຸງຄືນມີຄຸນນະພາບໃໝ່. ການປະຕິບັດໜ້າທີ່ບັນລຸປະສິດທິຜົນສູງຂຶ້ນ, ປະກອບສ່ວນເຂົ້າໃນການປະຕິບັດ ນະໂຍບາຍປ່ຽນແປງໃໝ່ຂອງພັກ ແລະ ເຮັດໃຫ້ການປົກປັກຮັກສາ ແລະ ພັດທະນາ ນະຄອນຫລວງວຽງຈັນ ມີຄວາມໜັກແໜ້ນ ແລະ ຍາດເອົາຜົນງາມມາໄດ້ໃນຫຼາຍດ້ານ, ກົນໄກຄຸ້ມຄອງແບບເກົ່າອຸ້ຍລວມສູນອາດຍາສິດ ໄດ້ຖືກລົບລ້າງກົນໄກຄຸ້ມຄອງຕາມກົນໄກຕະຫຼາດໄດ້ສ້າງຂຶ້ນ ແລະ ໄດ້ກຳນົດ ນະຄອນຫລວງວຽງຈັນ ເຂົ້າສູ່ໄລຍະແຫ່ງການພັດທະນາໄວຂຶ້ນ.

ຄ. ທິດທາງແຜນການ ພັດທະນາ ເສດຖະກິດ - ສັງຄົມ ໃນໄລຍະ ແຕ່ປີ 1996 - 2000 ຂອງນະຄອນຫລວງວຽງຈັນ.

ເພື່ອສືບຕໍ່ຊຸ້ນຳ - ນຳພາກໍ່ສ້າງ ນະຄອນຫລວງ ໃນໄລຍະໃໝ່, ກອງປະຊຸມອົງຄະນະພັກ ນະຄອນຫລວງ ຄັ້ງທີ II (31/3-2/ 4/1994) ໄດ້ເລືອກຕັ້ງເອົາ ຄະນະບໍລິຫານງານພັກ ແລະ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ມີດັ່ງນີ້:

1. ສະຫາຍ ບຸນຍັງ ວໍລະຈິດ ເປັນເລຂາຄະນະພັກ ນະຄອນຫລວງ
2. ສະຫາຍ ບຸນເລີດ ສຸລິວົງ ເປັນຮອງເລຂາຄະນະພັກ.
3. ສະຫາຍ ພັ/ອ ສີບຸນ ຄຸນທອງບາງ ເປັນກຳມະການ ປະຈຳພັກ.
4. ສະຫາຍ ຈານນອງ ອິນທະວົງ ເປັນກຳມະການປະຈຳພັກ.
5. ສະຫາຍ ທອງມີ ພິມວິໄຊ ເປັນກຳມະການປະຈຳພັກ.
6. ສະຫາຍ ພັ/ອ ສົມລິດ ຈັນດາວົງ ເປັນກຳມະການປະຈຳພັກ.
7. ສະຫາຍ ພູທອງ ແສງອາຄົມ ເປັນກຳມະການປະຈຳພັກ.
8. ສະຫາຍ ໜູນໄຊ ສິດທິໄຊ ເປັນກຳມະການພັກ.
9. ສະຫາຍ ຈັນດາ ຄຳສີ ເປັນກຳມະການພັກ.
10. ສະຫາຍ ສົມວັນດີ ນາຖະວົງ ເປັນກຳມະການພັກ.
11. ສະຫາຍ ນ ບຸນຍາ ພິນສະຫວາດ ເປັນກຳມະການພັກ.
12. ສະຫາຍ ອຳຄາ ພົມມະວົງ ເປັນກຳມະການພັກ.



ທ່ານ ບຸນຍັງ ວໍລະຈິດ
ກຳມະການກົມການເມືອງ
ສູນກາງພັກ, ເລຂາຄະນະພັກ,
ປະທານປົກຄອງ ກຳແພງ
ນະຄອນວຽງຈັນ
ປີ 1993 - 1996

13. ສະຫາຍ ດຣ ນ ທອງພັນ ຈັນທະລາມີນ ເປັນກຳມະການພັກ.
14. ສະຫາຍ ຄຳອ້າຍ ວັນນະຈັນ ເປັນກຳມະການພັກ.
15. ສະຫາຍ ບົວໄລ ພົງສາ ເປັນກຳມະການພັກ.
16. ສະຫາຍ ສີເມືອງ ວັນນະສີ ເປັນກຳມະການພັກ.
17. ສະຫາຍ ທອງເຫລືອງ ທຳມະວົງ ເປັນກຳມະການພັກ.
18. ສະຫາຍ ແກ່ນຕາ ກອງບຸນມີ ເປັນກຳມະການພັກ.
19. ສະຫາຍ ພ/ທ ບຸນທອນ ໄຊສົງຄາມ ເປັນກຳມະການພັກ.
20. ສະຫາຍ ຄຳມະນີ ພັນທະວົງສີ ເປັນກຳມະການພັກ.
21. ສະຫາຍ ອຸ່ນເຮືອນ ໂພທິລາດ ເປັນກຳມະການພັກ.

ຕໍ່ໜ້າຄວາມຮຽກຮ້ອງຕ້ອງການອັນໃຫຍ່ຫລວງ ຂອງການປະຕິວັດໄລຍະໃໝ່, ອຳນາດການປົກຄອງນະຄອນຫລວງ ກໍ່ໄດ້ຮັບການປັບປຸງບູລະນະ ເປັນຕົ້ນ ແມ່ນວຽກງານການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ - ສັງຄົມ, ຄະນະປະຈຳພັກ ນະຄອນຫລວງວຽງຈັນ ໄດ້ມີມະຕິແບ່ງປັນໜ້າທີ່ຄວາມຮັບຜິດຊອບຂອງພະນັກງານຂັ້ນນຳ (ນະຄອນຫລວງ - ເມືອງ).

ສະບັບ ເລກທີ 54/ ລຂ.ກພ (ວັນທີ 2/4/1994) ດັ່ງນີ້:

1. ສະຫາຍ ບຸນຍັງ ວໍລະຈິດ ເປັນເລຂາຄະນະພັກ, ເຈົ້າຄອງ ນະຄອນຫລວງ ຊີ້ນຳຂົງເຂດວຽກງານຄຸ້ມຄອງ ບໍລິຫານ (ຫ້ອງວ່າການ) ໂຄສະນາອົບຮົມ ແລະ ການສຶກສາ.

2. ສະຫາຍ ບຸນເລີດ ສຸລິວົງ ເປັນຮອງເລຂາຄະນະພັກ, ຫົວໜ້າຈັດຕັ້ງຊີ້ນຳວຽກງານກວດກາ, ຖະແຫລງຂ່າວ - ວັດທະນະທຳ ແລະ ເມືອງ ຫາດຊາຍຟອງ.

3. ສະຫາຍ ສີບຸນ ຄຸນທອງບາງ ເປັນກຳມະການປະຈຳພັກ, ຫົວໜ້າກອງບັນຊາການທະຫານ, ຊີ້ນຳເມືອງ ນາຊາຍທອງ.

4. ສະຫາຍ ຈານນອງ ອິນທະວົງ ເປັນກຳມະການປະຈຳພັກ, ປະທານແນວລາວສ້າງຊາດ, ຊີ້ນຳວຽກງານແມ່ຍິງ, ກຳມະບານ ແລະ ເມືອງ ໄຊເຊດຖາ.

5. ສະຫາຍ ທອງມີ ພົມມີໄຊ ກຳມະການປະຈຳພັກ, ຫົວໜ້າພະແນກກະສິກຳ - ປ່າໄມ້ຊີ້ນຳວຽກງານການຄ້າ, ອຸດສະຫະກຳ - ຫັດຖະກຳ ແລະ ເມືອງ ຈັນທະບູລີ.

6. ສະຫາຍ ພ/ອ ສົມລິດ ລັດດາວົງ ກຳມະການປະຈຳພັກ, ຫົວໜ້າກອງບັນຊາການ ປ.ກ.ສ ຊີ້ນຳວຽກງານຊາວໜຸ່ມ, ສາມໄອຍະການ ແລະ ເມືອງສັງທອງ.

7. ສະຫາຍ ພູທອງ ແສງອາຄົມ ກຳມະການພັກ, ຫົວໜ້າພະແນກ ຄົມມະນາຄົມ, ຊີ້ນຳວຽກງານການເງິນ ແລະ ເມືອງ ສີສັດຕະນົມ.

8. ສະຫາຍ ຈັນດາ ຄຳສີ ກຳມະການພັກ, ປະທານສະຫະພັນກຳມະບານ.

9. ສະຫາຍ ໜູໄຊ ສິດທິໄຊ ກຳມະການພັກ, ປະທານກວດກາ.

10. ສະຫາຍ ສົມວັນດີ ນາຖະວົງ ກຳມະການພັກ, ຫົວໜ້າຫ້ອງວ່າການນະຄອນຫລວງ.

11. ສະຫາຍ ອຳຄາ ພົມມະວົງ ກຳມະການພັກ, ເລຂາຄະນະຊາວໜຸ່ມ

12. ສະຫາຍ ບົວໄລ ພົງສາ ກຳມະການພັກ, ຫົວໜ້າຄະນະໂຄສະນາອົບຮົມ.

13. ສະຫາຍ ດຣ ນ ທອງພັນ ກຳມະການພັກ, ຫົວໜ້າພະແນກ ສາທາລະນະສຸກ.

14. ສະຫາຍ ນາງ ບຸນຍາ ພົກສະຫວາດ ກຳມະການພັກ, ປະທານສະຫະພັນແມ່ຍິງ.

15. ສະຫາຍ ຄຳອ້າຍ ວັນນະຈັນ ກຳມະການພັກ, ຫົວໜ້າພະແນກ ການເງິນ.

16. ສະຫາຍ ທອງເຫລືອງ ທຳມະວົງ ກຳມະການພັກ, ເລຂາພັກ ເຈົ້າເມືອງ ໄຊເຊດຖາ

17. ສະຫາຍ ສີເມືອງ ວັນນະສີ ກຳມະການພັກ, ເລຂາພັກ ເຈົ້າເມືອງ ໄຊທານີ.

18. ສະຫາຍ ແກ່ນຕາ ກອງບຸນມີ ກຳມະການພັກ, ເລຂາພັກ ເຈົ້າເມືອງ ເມືອງສັງທອງ.

19. ສະຫາຍ ຄຳມະນີ ພັນທະວົງສີ ກຳມະການພັກ, ເລຂາພັກ ເຈົ້າເມືອງ ເມືອງສີສັດຕະນາກ.

20. ສະຫາຍ ບຸນທອນ ໄຊສົງຄາມ ກຳມະການພັກ, ເລຂາພັກ ເຈົ້າເມືອງ ເມືອງສີໂຄດຕະບອງ.

21. ສະຫາຍ ອຸ່ນເຮືອນ ໂພທິລາດ ກຳມະການພັກ, ເລຂາພັກເມືອງ ເມືອງ ນາຊາຍທອງ.

ໃນແຜນການ 5 ປີ ຄັ້ງທີ IV (1996 - 2000) ນະຄອນຫລວງວຽງຈັນ ໄດ້ກຳນົດທິດທາງ, ໜ້າທີ່ແຫ່ງການພັດທະນາເສດຖະກິດ - ສັງຄົມ ໄປຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫລັກການຂອງພັກ. ດັ່ງໄດ້ກຳນົດໄວ້ໃນໜ້າທີ່ລວມ ແລະ ຄາດໝາຍສູ້ຊົນ ຄື:

- ເສີມຂະຫຍາຍທ່າແຮງບົ່ມຊ້ອນຂອງ ນະຄອນຫລວງວຽງຈັນ ບົນຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສ້າງທຸກກຳລັງ ເພື່ອຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດ ດ້ວຍຄວາມຕັ້ງໜ້າ ແລະ ເຄັ່ງຮ້ອນກວ່າເກົ່າ.

- ນຳໃຊ້ ແລະ ເສີມຂະຫຍາຍຄຸນ ປະໂຫຍດຂອງທຸກພາກສ່ວນເສດຖະກິດຕ່າງໆ ເຂົ້າໃນການຂະຫຍາຍການຜະລິດ ແລະ ການບໍລິການ ເພື່ອຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າເທື່ອລະກ້າວ, ແນໃສ່ຍົກສູງຊີວິດການເປັນຢູ່ຂອງ ປະຊາຊົນ ບັນດາເຜົ່າ ໃຫ້ນັບມື້ດີຂຶ້ນ.

- ສືບຕໍ່ສ້າງໂຄງປະກອບເສດຖະກິດ ກະສິກຳ - ປ່າໄມ້, ອຸດສະຫະກຳ, ປຸງແຕ່ງ ແລະ ການບໍລິການ ໃຫ້ປະກົດເປັນຈິງ.

- ດຳເນີນການ ພັດທະນາຊົນນະບົດ ຮອບດ້ານ ໃຫ້ມີຈຸດສຸມແຫ່ງການພັດທະນາ ແລະ ສ້າງຈຸດທົດລອງໃນບໍລິເວນທີ່ມີເງື່ອນໄຂ.

- ເພີ່ມທະວີບົດບາດແຫ່ງອຳນາດລັດ ຕໍ່ການນຳພາ ແລະ ຄຸ້ມຄອງທຸລະກິດ ໄປຕາມທິດ ຂະຫຍາຍຕົວຂອງກົນໄກ ເສດຖະກິດຕະຫລາດ ທີ່ມີການນຳພາຂອງພັກ ແລະ ຄຸ້ມຄອງຂອງ ລັດ ແບ່ງຂັ້ນຄຸ້ມຄອງຄວາມຮັບຜິດຊອບໃຫ້ຈະແຈ້ງ ລະຫວ່າງ ສູນກາງ ແລະ ນະຄອນວຽງຈັນ ໃນການຄຸ້ມຄອງ ແລະ ເຄື່ອນໄຫວດ້ານທຸລະກິດຂອງບັນດາຫົວໜ່ວຍທຸລະກິດ.

- ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນຂອງນັກທຸລະກິດຕ່າງປະເທດ ເສີມຂະຫຍາຍຄວາມສາມາດ ແລະ ທ່າແຮງຂອງນັກທຸລະກິດພາຍໃນປະເທດ, ແນໃສ່ສ້າງພື້ນ ຖານໃນ ນະຄອນຫລວງວຽງຈັນ ໃຫ້ມີທ່າຂະຫຍາຍຕົວ ໃນຈັງຫວະປົກກະຕິ ແລະ ຕໍ່ເນື່ອງ.

ເພື່ອບັນລຸຄາດໝາຍດັ່ງກ່າວຂ້າງເທິງນັ້ນ, ແຕ່ໄລຍະປີ 1996 - 2000, ນະຄອນຫລວງ ວຽງຈັນ ຈະໄດ້ສູ້ຊົນໃຫ້ໄດ້ດັ່ງນີ້:

* ຍອດຜະລິດຕະພັນສັງຄົມພາຍໃນ (GDP) ໃຫ້ໄດ້ 212.774,54 ລ້ານກີບ. ຫລື ໃຫ້ ເພີ່ມຂຶ້ນ 8%, ໃນນັ້ນ:

+ ຍອດຜະລິດຕະພັນ ກະສິກຳ - ປ່າໄມ້, ເພີ່ມຂຶ້ນແຕ່ 6% - 7%.

+ ຍອດຜະລິດຕະພັນ ອຸດສະຫະກຳ ແລະ ຫັດຖະກຳ ເພີ່ມຂຶ້ນແຕ່ 10% - 11%.

+ ຍອດຜະລິດຕະພັນ ການບໍລິການ ເພີ່ມຂຶ້ນ ແຕ່ 9% - 10%.

+ ສະເລ່ຍລາຍຮັບ ຕໍ່ຫົວຄົນ ໃຫ້ເພີ່ມຂຶ້ນ ປະມານ 5% ເທົ່າກັບ 360.000 ກີບ ຫລື 500 ໂດລາ/ຄົນ/ປີ.

ງ. ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ III (27/12/1999).

ວັນທີ 27/12/1999 ກອງປະຊຸມອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ III ໄດ້ໄຂ ຂຶ້ນພາຍໃຕ້ການເປັນປະທານຂອງ ທ່ານ ບຸນຍັງ ວໍລະຈິດ ກຳມະການສູນກາງພັກ, ເລຂາຄະ ນະພັກ ນະຄອນຫລວງວຽງຈັນ ມີຜູ້ແທນສົມບູນເຂົ້າຮ່ວມ 173 ທ່ານ, ຍິງ23 ທ່ານ ມີຕົວແທນ ຂອງປະຊາຊົນບັນດາເຜົ່າ, ບັນດາອົງການຈັດຕັ້ງ ແລະ 9 ຕົວເມືອງ, ຫົວໜ່ວຍທຸລະກິດ ຊຶ່ງ ແມ່ນຕົວແທນຂອງສະມາຊິກພັກ ນະຄອນຫລວງ ກວ່າ 5924 ສະຫາຍ. ໃນກອງປະຊຸມ ຄັ້ງນີ້ ໄດ້ຮັບຕ້ອນສະຫາຍ ທອງສິງ ທຳມະວົງ ກຳມະການກົມການ ເມືອງສູນກາງພັກ, ຜູ້ປະຈຳການ ກົມການເມືອງ ສູນກາງພັກ, ຫົວໜ້າຄະນະຈັດຕັ້ງ ກໍ່ສ້າງພະນັກງານ ສູນກາງພັກ. ພິເສດກອງ ປະຊຸມ ໄດ້ຕ້ອນຮັບ ປະທານ ຄຳໄຕ ສີພັນດອນ ປະທານປະເທດ ສປປ ລາວ.

ກອງປະຊຸມອົງຄະນະພັກ ນະຄອນຫລວງ ຄັ້ງທີ III ໄດ້ຮັບຮອງເອົານະໂຍບາຍກ່ຽວກັບ ໂຄງປະກອບເສດຖະກິດ, ກົນໄກການຄຸ້ມຄອງເສດຖະກິດໃໝ່ ແລະ ເຊີດຊູຄວາມສັກສິດແຫ່ງ

ການຈັດຕັ້ງປະຕິບັດ, ພ້ອມທັງໄດ້ທົບທວນຄືນ ການປະຕິບັດໜ້າທີ່ ຊຶ່ງກອງປະຊຸມ ສະໄໝທີ II ໄດ້ເປີດເສັ້ນທາງໄວ້ (1994 - 1999) ດ້ວຍຜົນງານ ແລະ ໄຊຊະນະ ແຫ່ງການຊີ້ນຳ - ນຳພາ ຂອງຄະນະພັກ ນະຄອນຫລວງ, ຂັ້ນເມືອງ ແລະ ຮາກຖານ ເປັນຕົ້ນ:



ກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ
ນະຄອນຫລວງວຽງຈັນ

1. ກ່ຽວກັບຂົງເຂດ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ:

ປະເທດຊາດ ໄດ້ດຳເນີນການກໍ່ສ້າງ ດ້ວຍບາດກ້າວອັນໜັກແໜ້ນຮອບດ້ານ, ສະພາບແວດລ້ອມສາກົນ ໄດ້ປ່ຽນແປງຢ່າງສັບສົນ ນັບທັງດ້ານການເມືອງ, ການທະຫານ ແລະ ເສດຖະກິດ ແລະ ໄດ້ກາຍເປັນເງື່ອນໄຂກົດດັນ ໃຫ້ແກ່ການກໍ່ສ້າງປະເທດຊາດ ຂອງພວກເຮົາ. ດ້ວຍພາລະບົດບາດດ້ານທີ່ຕັ້ງຂອງ ນະຄອນຫລວງວຽງຈັນ ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ທັງແມ່ນທີ່ຕັ້ງຂອງ ອົງການນຳສູງສຸດຂອງພັກ - ລັດຖະບານ. ຍ້ອນແນວນັ້ນ, ຈຶ່ງເປັນເປົ້າໝາຍຈຸດສຸມ ແຫ່ງການມ້າງເພທຳລາຍ ຂອງອິດທິກຳລັງປໍລະປັກ.

ເພື່ອສືບຕໍ່ປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ ເຂັ້ມແຂງ, ຄະນະບໍລິຫານງານພັກ ນະຄອນຫລວງວຽງຈັນ ແຕ່ລະຂັ້ນໄດ້ເອົາໃຈໃສ່ ແລະ ຫັນເປັນຍຸດທະສາດ ແຫ່ງການກໍ່ສ້າງພັດທະນາຕົວເມືອງ ແລະ ຊຸມນຸມຮອບດ້ານຕິດແໜ້ນກັບການປັບປຸງກໍ່ສ້າງກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແຕ່ຂັ້ນຮາກຖານຂຶ້ນຮອດ ນະຄອນຫລວງ ໃຫ້ມີຄວາມສະຫງົບ, ເອົາໃຈໃສ່ກວດກາ, ປັບປຸງກໍ່ສ້າງຮາກຖານ, ກຳຈັດແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ການປັບປຸງບູລະນະລະບົບການເມືອງ ປະຊາທິປະໄຕ ປະຊາຊົນ.



ຮັບຄຳສັ່ງ ຈາກຜູ້ບັນຊາ ກ່ອນການເຝິກແອບ



ກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ເວລາໃດກໍ່ກຽມພ້ອມ ເພື່ອປົກປ້ອງ ນະຄອນຫລວງວຽງຈັນ.

ພະນັກງານ ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບການສຶກສາອົບຮົມ, ຮັບຮູ້ ເຂົ້າໃຈແຈ້ງຕື່ມ ຕໍ່ເລ່ຫລ່ຽມກົນອຸບາຍ ມ້າງເພທຳລາຍ ຂອງພວກອິດທິກຳລັງປໍລະປັກ, ເຊີດຊູ ນ້ຳໃຈຮັກຊາດ, ຮັກລະບອບໃໝ່, ຍົກສູງສະຕິຕື່ນຕົວເປັນເຈົ້າຂອງປະເທດຊາດ ແລະ ຕື່ນຕົວ ເຂົ້າຮ່ວມໃນການ ພັດທະນາ ແລະ ປົກປັກຮັກສາປະເທດຊາດ. ເພື່ອຮັບປະກັນບັນດາທິດທາງ ໜ້າທີ່ໃຫ້ບັນລຸຜົນສຳເລັດ ຄະນະບໍລິຫານງານພັກ ນະຄອນຫລວງ ໄດ້ເອົາໃຈໃສ່ເປັນພິເສດຕໍ່ ການກໍ່ສ້າງ ແລະ ຂະຫຍາຍຖັນແຖວ ກຳລັງປະກອບອາວຸດ ປ້ອງກັນຊາດ - ປ້ອງກັນຄວາມສະ ຫງົບ, ປັບປຸງທາງດ້ານການເມືອງ - ແນວຄິດ ແລະ ການຈັດຕັ້ງ, ຍົກສູງສະຕິລະວັງຕົວປະຕິ ວັດ, ປະຕິບັດລະບຽບວິໄນ ແລະ ຄວາມຮັບຜິດຊອບ, ປັບປຸງການຈັດຕັ້ງກຳລັງກອງຫລອມ, ປກສ ຂັ້ນບ້ານ, ປຸກລະດົມຊຸກຍູ້ປະຊາຊົນສົ່ງລູກຫລານໄປເປັນທະຫານພັນທະ, ສ້າງຄອບຄົວ, ເຮັດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ກວດກາ, ປັບປຸງສຳມະໂນຄົວໃໝ່, ຂຶ້ນ ບັນຊີພົນລະເມືອງ ແລະ ແກ້ໄຂເປົ້າໝາຍບໍ່ດີຕ່າງໆ.

2. ກ່ຽວກັບຂົງເຂດເສດຖະກິດ:

ໃນຊຸມປີຜ່ານມາ, ອົງຄະນະພັກ ໄດ້ເອົາໃຈໃສ່ນຳພາ ປະຊາຊົນບັນດາເຜົ່າ ປັບປຸງ ແລະ ກໍ່ສ້າງ ເຮັດໃຫ້ເສດຖະກິດພາຍໃນ ນະຄອນຫລວງ ໄດ້ເຕີບໃຫຍ່ຂະຫຍາຍຕົວ ເປັນກ້າວໆ, ອັນທີ 31/3/1994 ກອງປະຊຸມຄົບຄະນະ ຄັ້ງທີ 8 (ສະໄໝທີ V) ຂອງຄະນະບໍລິຫານງານສູນ ກາງພັກ ໄດ້ຮັບຮອງເອົາມະຕິກ່ຽວກັບການພັດທະນາຊົນນະບົດ. ຊຶ່ງຈຸດໝາຍແມ່ນຕ້ອງຂຸດຄົ້ນ ແລະ ນຳໃຊ້ທ່າແຮງໃນທຸກດ້ານຂອງເຂດຊົນນະບົດຢ່າງສຸດຂີດ ແລະ ມີປະສິດທິຜົນສູງ, ປຸກ ລະດົມຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າ, ຫັນປ່ຽນແບບແຜນ ແລະ ການດຳລົງຊີ ວິດແບບດັ້ງເດີມ ໄປສູ່ອັນໃໝ່.

ເພື່ອບັນລຸຄາດໝາຍ ດັ່ງກ່າວນັ້ນ, ອົງຄະນະພັກນະຄອນຫລວງ ໄດ້ມີບັນດາຄາດໝາຍ ໃນການຈັດຕັ້ງຊີ້ນຳ - ນຳພາຊາວນະຄອນຫລວງ, ບັນດາເມືອງອ້ອມຂ້າງໂຄສະນາ, ປຸກລຸກທົ່ວ ປວງຊົນ ເຂົ້າຮ່ວມແນວທາງເສດຖະກິດຂອງພັກ - ລັດ, ຂະຫຍາຍ ແລະ ປັບປຸງຄືນບັນດາໂຮງ ຈັກໂຮງງານ, ຂະຫຍາຍຕະຫລາດຈຳໜ່າຍສິນຄ້າ ພາຍໃນນະຄອນຫລວງ ເອົາໃຈໃສ່ການຜະ ລິດກະສິກຳ - ປ່າໄມ້ ເຮັດໃຫ້ຫລາຍຄອບຄົວ, ໝູ່ບ້ານໄດ້ກາຍເປັນແບບຢ່າງການຜະລິດກະ ສິກຳ - ລ້ຽງສັດ ທີ່ໂດດເດັ່ນຂຶ້ນ ເປັນຕົ້ນ ກຸ່ມສະຫະກອນ ດ່ານຊ້າງ ກະເສດນາບົງ, ຊຶ່ງລັດໄດ້ ຮ່ວມລົງທຶນເປັນຈຳນວນຫລວງຫລາຍ. ມາຮອດປີ 1995, ຍອດຜະລິດຕະພັນພາຍໃນໄດ້ເພີ່ມ ຂຶ້ນສະເລ່ຍ 9,51% ຕໍ່ປີ, ລາຍຮັບສະເລ່ຍໄດ້ 795 ໂດລາຕໍ່ຄົນ. ໄປພ້ອມກັບວຽກງານພັດທະ ນາຊົນນະບົດ, ຢູ່ນະຄອນຫລວງວຽງຈັນ ຍັງໄດ້ເອົາໃຈໃສ່ຊີ້ນຳ - ນຳພາວຽກງານ ກະສິກຳ -

ປ່າໄມ້, ອຸດສະຫະກຳ - ຫັດຖະກຳ, ການຄ້າ, ການທ່ອງທ່ຽວ, ຄົມມະນາຄົມຂົນສົ່ງໄປສົ່ງມີ ແລະ ກໍ່ສ້າງ, ວຽກງານການເງິນ - ທະນາຄານ ແລະ ວຽກງານພົວພັນ ຮ່ວມມືກັບຕ່າງປະເທດ.



ໂຮງງານຜະລິດ ຫົວອາຫານແຫ່ງໜຶ່ງ ຢູ່ໃນນະຄອນຫລວງວຽງຈັນ

ໂດຍສະເພາະ ແມ່ນດ້ານກະສິກຳ, ແນໃສ່ເພື່ອຍົກສະມັດຕະພາບ ເຂົ້າກົນຂອງກຸ່ມຊາວ ນາ ຜູ້ຜະລິດເຂົ້າໃຫ້ໄດ້ຄຸນນະພາບ ແມ່ນເລັ່ງໃສ່ບັນດາຄອບຄົວ ທີ່ມີບົດຮຽນ ແລະ ປະສົບ ການ ເຊັ່ນ: ໂຄງການກະເສດສຸມຫລັກ 6 ທ່ຽງ ມີ 17 ຄອບຄົວ (ມີເນື້ອທີ່ ຜະລິດເຂົ້າ 30 ເຮັກຕາ) ນອນຢູ່ເຂດບ້ານ: ບ້ານ ພູຄຳ, ໂນນບໍ່ແກ້ວ, ດ່ານຊ້າງ, ດອນຕົ້ວ, ດົງຊ້າງຫີນ, ສະພັງ ມຶກ, ພະຂາວ, ຮ່ອງສຸພາບ, ນາແຄ, ດອນໜູນ, ບ້ານ ໄຊແກ້ວ (ກວມເອົາ 2 ຕົວ ເມືອງ ໄຊທາ ນີ - ໄຊເຊດຖາ).



ການລ້ຽງ ປາກະຊັງ ກໍ່ແມ່ນອາຊີບໜຶ່ງ ທີ່ສ້າງລາຍໄດ້ໃຫ້ປະຊາຊົນ

3. ຂົງເຂດວັດທະນະທຳ - ສັງຄົມ.

ບົນພື້ນຖານທັດສະນະ, ຈຸດພິເສດຂອງ ນະຄອນຫລວງວຽງຈັນ ໄປພ້ອມກັບການຂະຫຍາຍຕາໜ່າງເສດຖະກິດ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບສຸກ. ວຽກງານວັດທະນະທຳ - ສັງຄົມ ຊຶ່ງແມ່ນວຽກງານໜຶ່ງ ນອນຢູ່ໃນຂອດຕັດສິນ ຈາກພຶດຕິກຳຕົວຈິງ ແຫ່ງການຈັດຕັ້ງປະຕິບັດແນວທາງ ປ່ຽນແປງໃໝ່ນັ້ນ ກໍ່ແມ່ນການເອົາໃຈໃສ່ຊີ້ນຳ ແລະ ຄຸ້ມຄອງ ກວດກາສັງຄົມ ຢ່າງໜັກແໜ້ນ. ເດືອນ 10/1994 ກອງປະຊຸມ ຄົບຄະນະ ຄັ້ງທີ IX ຂອງຄະນະບໍລິຫານງານສູນກາງພັກ (ສະໄໝທີ V) ໄດ້ວາງທິດທາງກ່ຽວກັບວຽກງານວັດທະນະທຳ ແລະ ໄດ້ຫັນເປັນມະຕິຕໍ່ກັບພື້ນຖານແຫ່ງການພັດທະນາ ແລະ ການຄົ້ງຕົວຂອງຊາດອອກ ຄື: ວັດທະນະທຳ ເປັນພື້ນຖານແຫ່ງການຍືນຍົງຄົ້ງຕົວຂອງຊາດ ແມ່ນກຳລັງດົນເຮັດໃຫ້ສັງຄົມ ມີການຂະຫຍາຍຕົວ ແລະ ວັດທະນະທຳ ຍັງແມ່ນຈຸດໝາຍພັດທະນາສັງຄົມ❶


---

1. *ຄັດຈາກເອກະສານ ກອງປະຊຸມ ອົງຄະນະພັກ ນະຄອນຫລວງວຽງຈັນ (31/3 - 2/4/11994).*



ປະເພນີບຸນຊ່ວງເຮືອ ຂອງຊາວ ນະຄອນຫລວງວຽງຈັນ

ເພື່ອສືບທອດມູນເຊື້ອ ສິລະປະ ວັດທະນະທຳ ທີ່ມີຫລາຍຮູບຫລາຍສີຂອງ ນະຄອນຫລວງວຽງຈັນ ໃຫ້ກາຍເປັນແບບຢ່າງລວມຂອງຊາດ, ໃຕ້ການນຳພາຂອງພັກ, ອົງຄະນະພັກ ອຳນາດການປົກຄອງ ນະຄອນຫລວງ ໄດ້ເອົາໃຈໃສ່ ເພີ່ມທະວີວຽກງານຄຸ້ມຄອງລັດ ທາງດ້ານ ວັດທະນະທຳ, ສະກັດກັ້ນກີນອຸບາຍ ແລະ ການກະທຳ ທີ່ເປັນການທຳລາຍມ້າງເພ ວັດທະນະ ທຳ ອັນດີງາມຂອງຊາດ, ສົ່ງເສີມຄຸນຄ່າທາງດ້ານມໍລະດົກ ທາງດ້ານວັດທະນະທຳ ຢ່າງຕັ້ງໜ້າ ຊຶ່ງກ່ອນອື່ນໝົດ ແມ່ນໄດ້ສຸມໃສ່ການກໍ່ສ້າງ ແລະ ຂະຫຍາຍຕາໜ່າງການ ສຶກສາ ທັງໄດ້ປັບ ປຸງຄຸນນະພາບ ການສຶກສາ ດີຂຶ້ນກວ່າເກົ່າ. ມາຮອດປີ 1999 (ກ່ອນກອງປະຊຸມ ຄັ້ງທີ 3), ຢູ່ ນະຄອນຫລວງວຽງຈັນ ໄດ້ມີໂຮງຮຽນສາມັນສຶກສາ ທັງໝົດ 575 ແຫ່ງທຽບໃສ່ປີ 1994 ເພີ່ມ ຂຶ້ນ 345 ແຫ່ງ ມີນັກຮຽນ ທັງໝົດ 159.564 ຄົນ ເພີ່ມຂຶ້ນ 23.520 ຄົນ, ມີຄູອາຈານ ທັງໝົດ 6.436 ຄົນ, ເພີ່ມຂຶ້ນ 771 ຄົນ.





ການສະແດງສິລະປະ ຂອງຊາວ ນະຄອນຫລວງວຽງຈັນ

ຢູ່ນະຄອນຫລວງວຽງຈັນ ຕາໜ່າງກິລາກາຍະກຳ ໄດ້ຂະຫຍາຍຕົວຢ່າງເປັນຂະບວນ, ການເຄື່ອນໄຫວຂອງມະຫາຊົນ ເຂົ້າຮ່ວມບັນດາກິດຈະກຳກິລານັບມື້ນັບກວ້າງຂວາງ ແລະ ຟົດ

ຟື້ນ. ມີການຈັດຕັ້ງແຂ່ງຂັນຫລາຍປະເພດກິລາຢູ່ພາຍໃນ ແລະ ຕ່າງແຂວງ. ໃນຊຸມປີຜ່ານມານີ້, ນະຄອນຫລວງພວກເຮົາໄດ້ສົ່ງນັກກິລາປະເພດຕ່າງໆ ເຂົ້າແຂ່ງຂັນໃນລະດັບຊາດ ແລະໄດ້ນຳເອົາຫລຽນຄຳ, ຫລຽນເງິນປະເພດຍ້ອງຍໍຕ່າງໆ ອັນໄດ້ສ້າງຊື່ສຽງບົດບາດສຳຄັນ ໃຫ້ແກ່ປະເທດຊາດ ກໍ່ຄື ນະຄອນຫລວງວຽງຈັນ ໄດ້ເປັນເຈົ້າພາບ ຈັດງານແຂ່ງຂັນກິລາແຫ່ງຊາດ ຄັ້ງທີ I ປີ 1994 ມີນັກກິລາ ເຂົ້າຮ່ວມນັບຫລາຍຮ້ອຍຄົນ.

ດ້ານສາທາລະນະສຸກ: ໃນຊຸມປີຜ່ານມາ ກອງປະຊຸມ ຄະນະພັກ ນະຄອນຫລວງ ໄດ້ຕີລາຄາສູງ ຕໍ່ສະພາບການເຄື່ອນໄຫວຂອງວຽກງານ ສາທາລະນະສຸກ ຊຶ່ງໄດ້ຂະຫຍາຍຕາໜ່າງອອກສູ່ຊົນນະບົດ ຢ່າງກວ້າງຂວາງ, ປະຊາຊົນ 90% ໄດ້ເຂົ້າຮ່ວມໂຄງການຕ້ານ ແລະ ກັນພະຍາດຕ່າງໆ, ມາຮອດປະຈຸບັນນີ້ຢູ່ ນະຄອນຫລວງ ມີສຸກສາລາ 36 ແຫ່ງ, ມີຫ້ອງກວດພະຍາດເອກະຊົນ 58 ແຫ່ງ, ຫ້ອງປິ່ນປົວແຂ້ວ 18 ແຫ່ງ, ໂຮງໝໍເມືອງ 9 ແຫ່ງ, ປະຊາຊົນ ດຳລົງຊີວິດຕາມຫລັກການອະນາໄມສາມສະອາດ ນັບມື້ນັບຫຼາຍຂຶ້ນ ເຮັດໃຫ້ການເຈັບເປັນ ແລະ ການຕາຍຂອງ ປະຊາຊົນ ຫລຸດລົງຢ່າງຈະແຈ້ງ (ສະເລ່ຍອັດຕາການຕາຍ ຫລຸດລົງ ເຖິງ 3,4%, ອາຍຸຍືນຂອງຜູ້ຊາຍ ເພີ່ມຂຶ້ນ 59 ປີ, ຜູ້ຍິງ 61 ປີ).



ສະຖານີ ໂທລະພາບ ແຫ່ງຊາດ

ດ້ານວຽກງານຖະແຫລງຂ່າວ - ວັດທະນະທຳ; ເພື່ອເຮັດໃຫ້ ນະຄອນຫລວງວຽງຈັນ ມີໃບໜ້າໃໝ່, ການປັບປຸງລະບົບຖະແຫລງຂ່າວ, ສື່ມວນຊົນ ກໍ່ໄດ້ຕັ້ງໜ້າເຮັດໜ້າທີ່ ໂຄສະນາເຜີຍແຜ່ແນວທາງຂອງພັກ - ລັດ ວຽກດີຄົນເດັ່ນບົດຮຽນຕົວແບບ ແລະ ເຫດການ, ສະພາບການທີ່ພົ້ນເດັ່ນຕ່າງໆ ນັບທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ຊາວນະຄອນຫລວງໄດ້ຮັບຮູ້ຢ່າງຕໍ່ເນື່ອງ ເປັນຕົ້ນ ວຽກງານໂຄສະນາມູນເຊື້ອຮີດຄອງປະເພນີ ທີ່ເປັນເອກະລັກຂອງຊາດລາວ, ຂອງຊາວນະຄອນຫລວງ ໃຫ້ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຈັດຕັ້ງການປະກວດ, ອອກທະບຽນໜ່ວຍສິລະປະດົນຕີ, ຮ້ານບັນເທີງ, ຮ້ານວີດີໂອ, ຈຳໜ່າຍກະແຊັດເພງ, ຂັບລຳ...

ດ້ານວຽກງານແຮງງານ, ສະຫວັດດີການ - ສັງຄົມ: ປະຕິບັດຕາມທິດນຳຂອງພັກ - ລັດ, ການນຳ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຊີ້ນຳກ່ຽວກັບການປະຕິບັດນະໂຍບາຍ ຊຶ່ງເປັນແນວທາງຕົ້ນຕໍຂອງພັກ, ເບິ່ງແຍງປະຊາຊົນຊາວຜູ້ອອກແຮງງານ, ພະນັກງານເຖົ້າແກ່ອາວຸໂສ ບຳນານ ຕໍ່ຜູ້ເສຍອົງຄະ ໃນຍາມຕໍ່ສູ້ກູ້ຊາດ, ແກ້ໄຂຄວາມທຸກຍາກຂອງ ປະຊາຊົນ ສ້າງຕັ້ງສູນສົ່ງເສີມການພັດທະນາ ສີມືແຮງງານ ຝຶກອົບຮົມວິຊາຊີບ, ແກ້ໄຂວຽກເຮັດງານທຳ, ເອົາໃຈໃສ່ຄຸ້ມຄອງສິດຜົນປະໂຫຍດອັນຊອບທຳ ຂອງຊາວຜູ້ອອກແຮງງານ, ຮັບຊາວອົບພະຍົບກັບຄືນບ້ານເດີມ ແລະ ຈັດບ່ອນທຳມາຫາກິນທີ່ໝັ້ນທ່ຽງ ໃຫ້ແກ່ປະຊາຊົນບັນດາເຜົ່າ. ນອກຈາກວຽກງານສົ່ງເສີມສຸຂະພາບກິລາ, ສະຫວັດດີການ - ສັງຄົມແລ້ວ, ຄະນະນຳ ນະຄອນຫລວງ ຍັງໄດ້ເອົາໃຈໃສ່ຕໍ່ວຽກງານ ສຶກສາອົບຮົມ ປະຊາຊົນບັນດາເຜົ່າ ເຊີດຊູຈິດໃຈຮັກຊາດ, ຄວາມເປັນເອກະພາບ, ສາມັກຄີປອງດອງຊາດ, ມີຄວາມຮັກແພງຊ່ວຍເຫລືອຊຶ່ງກັນ ແລະ ກັນ, ພ້ອມກັນຕໍ່ສູ້ປົກປັກຮັກສາ ແລະ ພັດທະນານະຄອນຫລວງໃຫ້ຈະເລີນກ້າວໜ້າ, ເອົາໃຈໃສ່ປະຕິບັດນະໂຍບາຍຄວາມສະເໝີພາບລະຫວ່າງເຜົ່າຊົນ, ສຶກສາອົບຮົມນັກບວດ, ປັນຍາຊົນຜູ້ເຊື່ອຖືສາສະໜາຕ່າງໆ ໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບໃໝ່, ພ້ອມພຽງກັນກໍ່ສ້າງລະບອບໃໝ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ໃຫ້ເຂັ້ມແຂງ[1].

4. ຂົງເຂດລະບົບການເມືອງ, ການປົກຄອງ.

ການກໍ່ສ້າງ ລະບົບອຳນາດການປົກຄອງ ປະຊາທິປະໄຕ ປະຊາຊົນ ໃຫ້ສາມາດຮັບປະກັນວຽກງານຄຸ້ມຄອງລັດ, ຄຸ້ມຄອງກໍ່ສ້າງເສດຖະກິດ, ວັດທະນະທຳ - ສັງຄົມ ແລະ ໜ້າທີ່ປົກ


---

1. ອີງຕາມສະຖິຕິ ຂອງອົງການຄຸ້ມຄອງພົນລະເມືອງ ນະຄອນຫລວງ ໄດ້ຂຽນໄວ້ວ່າ: ປະຈຸບັນຢູ່ນະຄອນຫຼວງວຽງຈັນ ມີພະນັກງານເຖົ້າແກ່ບຳນານ 863 ຄົນເສຍອົງຄະໃນສົງຄາມ296ຄົນ.ເອກະສານສະບັບສຳເນົາຂໍ້ມູນປະຫວັດສາດ ຂຽນໂດຍ ທ່ານ ບຸນມາ ກອງມະນີ , ປີ 2000

ປັກຮັກສາຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມ ຂອງນະຄອນຫລວງວຽງຈັນ. ບັນດາຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ໄດ້ຖືເປັນໜ້າ ທີ່ໃຈກາງ ໃນການດຳເນີນງານຂອງຕົນ ຕະຫລອດ 20 ກວ່າປີ, ຜ່ານມາ ຊາວນະຄອນຫລວງ ວຽງຈັນ ໄດ້ຕັ້ງໜ້າປະຕິບັດບັນດາແຜນງານໂຄງການກໍ່ສ້າງພັດທະນາ ນະຄອນຫລວງ ໃຫ້ເຂັ້ມ ແຂງ ແລະ ມີສະຖຽນລະພາບທາງດ້ານການເມືອງ, ຊຶ່ງໃນກອງປະຊຸມອົງຄະນະພັກແຕ່ລະຄັ້ງ, ແຕ່ລະຂັ້ນລ້ວນແຕ່ໄດ້ເອົາໃຈໃສ່ ເນັ້ນໜັກເຖິງການກໍ່ສ້າງ ແລະ ປັບປຸງໃຫ້ເປັນປະຈຳຕໍ່ເມືອງ. ກ່ອນອື່ນໝົດ, ຕ້ອງເລີ່ມຈາກການຄັດເລືອກພະນັກງານ ໃຫ້ຖືກຕ້ອງຕາມມາດຖານ, ໄດ້ຮັບ ຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ, ດຳເນີນການເລືອກຕັ້ງ ໂດຍປະຊາຊົນໃນຮູບແບບປະຊາ ທິປະໄຕ ປະຊາຊົນ ພາຍໃຕ້ການນຳພາຂອງພັກ, ອຳນາດການປົກຄອງຂັ້ນຮາກຖານເປັນເປົ້າ ໝາຍສຳຄັນ ໃຫ້ແກ່ວຽກງານການເມືອງແນວຄິດ ເຮັດໃຫ້ອຳນາດການປົກ ຄອງເຂັ້ມແຂງ ແລະ ເຕີບໃຫຍ່ຢູ່ກັບຂະບວນການຕົວຈິງຂອງສັງຄົມ.

ວຽກງານກໍ່ສ້າງປັບປຸງລະບົບ ການເມືອງ ສະເພາະຢູ່ ນະຄອນຫລວງ ຊຶ່ງເປັນສູນກາງຂອງ ປະເທດຊາດ, ຕະຫລອດໄລຍະຜ່ານມານັບວ່າໄດ້ຮັບການເອົາໃຈໃສ່ຢ່າງຮອບດ້ານ ໜຶ່ງໃນນັ້ນ ກໍ່ແມ່ນວຽກງານແນວໂຮມ ຊຶ່ງແມ່ນພື້ນຖານແຫ່ງການກໍ່ສ້າງ ຄວາມເປັນເອກະພາບ ທົ່ວປວງ ຊົນ. ເດືອນ ກຸມພາ 1979, ຕາມມະຕິຕົກລົງຂອງກອງປະຊຸມໃຫຍ່ແນວລາວຮັກຊາດ ທົ່ວປະ ເທດ ໄດ້ໄຂຂຶ້ນ ທັງໄດ້ປັບປຸງກົດລະບຽບ, ພາລະບົດບາດ ແລະ ໄດ້ປ່ຽນຊື່ມາເປັນ “ **ແນວລາວ ສ້າງຊາດ**”. ໄລຍະປະເທດເຮົາດຳເນີນການປະຕິວັດສັງຄົມນິຍົມ (1976 - 1986) ຊຶ່ງເປັນໄລ ຍະແຫ່ງການຕໍ່ສູ້ຊົນຊັ້ນທີ່ດຸເດືອດ ເອົາເປັນເອົາຕາຍ ລະຫວ່າງ 2 ເສັ້ນທາງ; ຊາວນະຄອນຫຼວງ ວຽງຈັນ ພາຍໃຕ້ການນຳພາຂອງພັກ, ໄດ້ພ້ອມກັນຜ່ານຜ່າຄວາມຫຍຸ້ງຍາກສັບສົນ, ຂ້ຽວຂາດ ແລະ ເລິກຊຶ່ງເຖິງຖອງຍິ່ງກວ່າໄລຍະການປະຕິວັດຊາດ - ປະຊາທິປະໄຕ. ແນວລາວສ້າງຊາດ ນະຄອນຫລວງ ທີ່ໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍພາລະກິດແຫ່ງຄວາມສາມັກຄີບັນດາ ເຜົ່າໃນ ນະຄອນຫລວງ ກັບທົ່ວປະເທດ; ເພື່ອສືບຕໍ່ ແລະ ເສີມຂະຫຍາຍຜົນສຳເລັດທີ່ຍາດມາ ໄດ້ໄລຍະຜ່ານມາ, ວັນທີ 9 - 11/9/1987 ຢູ່ທີ່ ນະຄອນຫລວງວຽງຈັນ ໄດ້ໄຂກອງປະຊຸມໃຫຍ່ ແນວລາວສ້າງຊາດ ຄັ້ງທີ II ຂຶ້ນມີຜູ້ແທນພາຍໃນ 300 ຄົນ, ຕ່າງປະເທດ 11ຄະນະເຂົ້າຮ່ວມ.

ວັນທີ 27-29/12/1999, ກອງປະຊຸມໃຫຍ່ ຄະນະບໍລິຫານງານພັກ ນະຄອນຫລວງວຽງ ຈັນ ຄັ້ງທີ III ໄດ້ຮັບຮອງເອົາມະຕິ ຕົກລົງ ຂອງກົມການເມືອງ ສູນກາງພັກ ເລກທີ 04/ກມສພ, ລົງວັນທີ 19/1/2000 ວ່າດ້ວຍການແຕ່ງຕັ້ງ ຄະນະນຳນະຄອນຫລວງຊຸດໃໝ່ ຈຳນວນ 27 ສະຫາຍ (ໃນນັ້ນເປັນປະທານ ຄະນະກຳມະການ ກວດກາພັກ 1 ສະຫາຍ, ມີຄະນະປະຈຳພັກ



ທ່ານ ບຸນເຮືອງ ດວງພະຈັນ
ກຳມະການສູນກາງພັກ,
ເລຂາຄະນະພັກ, ເຈົ້າຄອງ
ນະຄອນຫຼວງວຽງຈັນ.
ປີ 1998 - 2001

7 ສະຫາຍ).

ກອງປະຊຸມ ໄດ້ແຕ່ງຕັ້ງ ທ່ານ ບຸນເຮືອງ ດວງພະຈັນ ເປັນເລຂາ ແລະ ເປັນຄະນະປະຈຳ ພັກ ນະຄອນຫລວງວຽງຈັນ:

- ສະຫາຍ ທອງມີ ພິມວິໄຊ ເປັນຮອງເລຂາ ແລະ ຄະນະປະຈຳພັກ.
- ສະຫາຍ ຈື່ວາ ໄຊຕົງ ເປັນປະທານ ຄະນະກຳມະການກວດກາພັກ.
- ສະຫາຍ ພ.ອ ສົມບູນ ທົງສະຫວັນ ຄະນະປະຈຳພັກ.
- ສະຫາຍ ພ.ອ ຕຸລາ ອິນທາທິລາດ ຄະນະປະຈຳພັກ.
- ສະຫາຍ ສົມວັນດີ ນາຖະວົງ ຄະນະປະຈຳພັກ.
- ສະຫາຍ ບຸນສີ ຫຼ້າທອງສະຫວັນ ຄະນະປະຈຳພັກ.
- ສະຫາຍ ບຸນໃຈ ບູ່ຕະວົງ ຄະນະປະຈຳພັກ.
- ສະຫາຍ ທອງເຫຼືອງ ທຳມະວົງ ກຳມະການພັກ.
- ສະຫາຍ ຈັນດາ ຄຳສີ ກຳມະການພັກ.
- ສະຫາຍ ແກ່ນຕາ ກອງບຸນມີ ກຳມະການພັກ.
- ສະຫາຍ ອຸ່ນເຮືອນ ໂພທິລາດ ກຳມະການພັກ.
- ສະຫາຍ ບຸນທອນ ໄຊສົງຄາມ ກຳມະການພັກ.
- ສະຫາຍ ສາຍທອງ ແກ້ວດວງດີ ກຳມະການພັກ.
- ສະຫາຍ ບຸນຈັນ ສົນທະວົງ ກຳມະການພັກ.
- ສະຫາຍ ບົວສີ ຈັນທະວົງ ກຳມະການພັກ.
- ສະຫາຍ ບຸນທອງ ພິມມະຈັນ ກຳມະການພັກ.
- ສະຫາຍ ໄມລາວ ສຸລິວົງ ກຳມະການພັກ.
- ສະຫາຍ ນ ອ່ອນຈັນ ພິມມະວົງ ກຳມະການພັກ.
- ສະຫາຍ ນ ບົວລອມ ວົງດາລາແສນ ກຳມະການພັກ.
- ສະຫາຍ ບຸນປອນ ສີສຸລາດ ກຳມະການພັກ.
- ສະຫາຍ ບຸນອູ້ມ ດວງພະຈັນ ກຳມະການພັກ.
- ສະຫາຍ ນ ທອງວັນຄຳ ສິດທິລາດ ກຳມະການພັກ.
- ສະຫາຍ ທອງຄູນ ແສງດາລາ ກຳມະການພັກ.
- ສະຫາຍ ສູນທອນ ສີລາເພັດ ກຳມະການພັກ.
- ສະຫາຍ ບຸນທ່ຽງ ຂຸນສີ ກຳມະການພັກ.

III. ການປະຕິບັດ ແຜນຍຸດທະສາດ ພັດທະນາເສດຖະກິດ - ສັງຄົມ ຂອງນະຄອນຫລວງວຽງຈັນ ແຕ່ປີ 2001 - 2010.

ເພື່ອຮັບຮູ້ລະອຽດ ຜົນສຳເລັດ ໃນການຈັດຕັ້ງປະຕິບັດ ຍຸດທະສາດ ພັດທະນາ ນະຄອນຫລວງວຽງຈັນ ໃຫ້ຫລຸດພົ້ນອອກຈາກຄວາມ ດ້ອຍພັດທະນານັ້ນ, ພວກເຮົາ ສາມາດແບ່ງອອກເປັນ 2 ໄລຍະ ຕາມກອງປະຊຸມໃຫຍ່ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ III ແລະ ທີ IV ດັ່ງນີ້:

ກ. ຜົນການປະຕິບັດແຜນຍຸດທະສາດ ພັດທະນາເສດຖະກິດ - ສັງຄົມ ຂອງນະຄອນຫຼວງວຽງຈັນ ໄລຍະປີ 2001- 2005.

ຜ່ານຂະບວນການຈັດຕັ້ງ ປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ແລະ ແຜນການ 5 ປີ ຄັ້ງທີ V ຜ່ານມາ, ຄະນະພັກ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ສຸມສະຕິປັນຍາ, ເຫື່ອແຮງ ແລະ ຄວາມຮັບຜິດຊອບສູງ ໃນການຊີ້ນຳ - ນຳພາຈັດຕັ້ງປະຕິບັດ ບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃນແຕ່ລະດ້ານ ດັ່ງນີ້:

- ດ້ານເສດຖະກິດ:

ຍ້ອນຄວາມເອົາໃຈໃສ່ໃກ້ຊິດຕິດແທດ, ຊີ້ນຳຢ່າງຈິດຈໍ່ຈາກຄະນະພັກ, ຄະນະບັນຊາ ນະຄອນຫລວງວຽງຈັນ ຕໍ່ທຸກຂົງເຂດວຽກງານຂອງຊີວິດສັງຄົມ ເວົ້າລວມ, ເວົ້າສະເພາະ ແມ່ນໃນຂົງເຂດເສດຖະກິດ. ຊຶ່ງນັບແຕ່ປີ 2001 - 2005 ພື້ນຖານເສດຖະກິດຂອງ ນະຄອນຫລວງວຽງຈັນ ໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍ, ຕາໜ່າງຄົມມະນາຄົມ, ໂທລະຄົມມະນາຄົມ, ອຸດສາຫະກຳເບົາ ແລະ ປຸງແຕ່ງຂະໜາດນ້ອຍ ໄດ້ມີການພັດທະນາຢ່າງກວ້າງຂວາງ ແລະ ທັນສະໄໝກວ່າເກົ່າ, ຕາໜ່າງການສຶກສາ, ສາທາລະນະສຸກ, ຂໍ້ມູນຂ່າວສານໄດ້ຂະຫຍາຍກວ້າງອອກສູ່ເຂດຊົນນະບົດ ເຮັດໃຫ້ປະຊາຊົນຜູ້ດ້ອຍໂອກາດ ໄດ້ຮັບການບໍລິການດ້ານຕ່າງໆ ດັ່ງກ່າວຫລາຍຂຶ້ນ.

ໂດຍຍຶດໝັ້ນຕໍ່ແນວທາງນະໂຍບາຍຂອງພັກ ແລະ ດ້ວຍຄວາມຮັບຜິດຊອບສູງຂອງອົງຄະນະພັກ - ອຳນາດການປົກຄອງທຸກຂັ້ນຂອງ ນະຄອນຫລວງວຽງຈັນ ໄດ້ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ. ຍ້ອນແນວນັ້ນ, ເສດຖະກິດຂອງ ນະຄອນຫລວງວຽງຈັນ ໄດ້ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ດ້ວຍຈັງຫວະດີພໍສົມຄວນ ລວມຍອດຜະລິດຕະພັນ ພາຍໃນສັງຄົມ ສະເລ່ຍໃນ 5 ປີ ປະຕິບັດໄດ້ 6.405 ຕື້ກີບ ເພີ່ມຂຶ້ນ 9,79% ທຽບໃສ່ການປະຕິບັດແຜນການ 5 ປີ ຄັ້ງທີ IV 1996 - 2000.

ໃນນັ້ນ:

+ ອຸດສາຫະກຳ - ກໍ່ສ້າງເພີ່ມຂຶ້ນ 10,82% ກວມເອົາ 50,30% ຂອງ GDP.
+ ບໍລິການ ເພີ່ມຂຶ້ນ 12,50% ກວມເອົາ 23,80% ຂອງ GDP.
+ ພາສີຂາເຂົ້າ ເພີ່ມຂຶ້ນ 9,54% ກວມເອົາ 4,49% ຂອງ GDP.

ລາຍໄດ້ສະເລ່ຍຕໍ່ຫົວຄົນ 5 ປີ ປະຕິບັດໄດ້ 953, 72 ໂດລາຕໍ່ຄົນ ຕໍ່ປີ ທຽບໃສ່ປະຕິບັດ 5 ປີ ຄັ້ງທີ IV (1996 - 2000 ລື່ນ 107, 72 ໂດລາ ແລະ ໃນສົກປີ 2003 - 2004 ປະຕິບັດໄດ້ 1.075 ໂດລາ ທຽບໃສ່ແຜນການ 5 ປີທີ່ວາງໄວ້ລື່ນ 75 ໂດລາ.

- **ດ້ານການປູກຝັງ:**

ໃນການຈັດຕັ້ງປະຕິບັດ ແຜນການ 5 ປີ ຄັ້ງທີ V (2001 - 2005) ສາມາດຜະລິດເຂົ້າໄດ້ທັງໝົດ 297.065, 60 ໂຕນ, ທຽບໃສ່ປີ 1996 - 2000 ຜົນຜະລິດເ ພີ່ມຂຶ້ນ 471,512,53 ໂຕນ, ເທົ່າກັບ 46,50%.

- **ດ້ານການລ້ຽງສັດ - ປະມົງ.**

ນະຄອນຫລວງວຽງຈັນ ໄດ້ຕັ້ງໜ້າສົ່ງເສີມການລ້ຽງສັດ ແລະ ປະມົງ ດ້ວຍການໝູນໃຊ້ເຕັກນິກ, ວິທະຍາການ ເຂົ້າສູ່ການລ້ຽງສັດແບບເປັນຟາມ, ສະແດງອອກໃນປີ 1996 - 2000 ນະຄອນຫລວງວຽງຈັນ ມີຟາມທັງໝົດ 169 ຟາມ ແຕ່ມາຮອດປີ 2001 - 2005 ມີ 187 ຟາມ, ເພີ່ມຂຶ້ນ 18 ຟາມ ຊຶ່ງມີ ງົວ, ຄວາຍ, ໝູ, ແບ້ ແລະ ແກະ ທັງໝົດ 137. 965 ໂຕ, ທຽບໃສ່ປີ 1996 - 2000 ເພີ່ມຂຶ້ນ 38. 938 ໂຕ. ໃນປີ 2001 -2005, ສຳລັບສັດປີກ ສາມາດລ້ຽງໄດ້ 2.212.488 ໂຕ ທຽບໃສ່ປີ 1996 - 2000 ເພີ່ມຂຶ້ນ 503.098 ໂຕ, ການລ້ຽງປາກະຊັງ ມີທັງໝົດ 1.101 ກະຊັງ ເພີ່ມຂຶ້ນ 301 ກະຊັງ. ສັງລວມແລ້ວ, ການຜະລິດຊີ້ນຂອງ ນະຄອນຫລວງວຽງຈັນ ໃນສົກປີ 2001-2005 ຜະລິດໄດ້ ທັງໝົດ 101.359 ໂຕນ, ທຽບໃສ່ໄລຍະປີ 1996 - 2000 ເພີ່ມຂຶ້ນ 3,789 ໂຕນ ເທົ່າກັບ 3,88%.

- **ດ້ານການປ່າ-ໄມ້:**

ໄດ້ເອົາໃຈໃສ່ການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້, ຊຶ່ງໃນທ້າຍປີ 2002 ຜ່ານມາ ນະຄອນຫລວງວຽງຈັນ ໄດ້ປະກາດຢ່າງເປັນທາງການ ກ່ຽວກັບ ການປົກປັກຮັກສາ ປ່າສະຫງວນ, ສັດນ້ຳ, ສັດປ່າ... ມາຮອດປີ 2005 ນະຄອນຫລວງວຽງຈັນ ມີສວນກ້າເບ້ຍໄມ້ທັງໝົດ ນັບທັງຂອງລັດ ແລະ ເອກະຊົນ 111 ແຫ່ງ, ສາມາດກ້າເບ້ຍໄມ້ ໄດ້ 8.772,748 ເບ້ຍ ແລະ ປູກໄມ້ ໄດ້ 7.009. 447 ເຮັກຕາ.

• **ວຽກງານ ຊົນລະປະທານ:**

ມາຮອດປີ 2005 ນະຄອນຫລວງວຽງຈັນ ມີລະບົບຊົນລະປະທານ ທັງໝົດ 108 ແຫ່ງ; ໃນນີ້ມີອ່າງເກັບນ້ຳ 8 ແຫ່ງ, ຝາຍນ້ຳລົ້ນ 4 ແຫ່ງ, ສະຖານີຈັກສູບນ້ຳ 96 ແຫ່ງ, ມີຈັກສູບນ້ຳຕິດຕັ້ງເທິງແພ 348 ເຄື່ອງ, ມີລະບົບຄອງເໝືອງ ຈຳນວນ 112 ເສັ້ນ, ຍາວ 239,32 ກິໂລແມັດ, ສາມາດຫົດ ເນື້ອທີ່ລະດູແລ້ງ ໄດ້ 23.337 ເຮັກຕາ.

• **ດ້ານການວາງແຜນ ພັດທະນາດິນ.**

ນະຄອນຫລວງວຽງຈັນ ບໍ່ມີເນື້ອທີ່ໄຮ່ເລື່ອນລອຍ. ສະນັ້ນ, ໃນໄລຍະປີ 2001- 2005 ຈຶ່ງ ໄດ້ເອົາໃຈໃສ່ວຽກງານ ຈັດສັນດິນ ແລະ ທີ່ຢູ່ອາໄສ ທຳການຜະລິດ ໃຫ້ແກ່ປະຊາຊົນ ຜູ້ທີ່ຂາດ ບ່ອນຢູ່ອາໄສ ແລະ ຖືກແຜນໂຄງການ, ຊຶ່ງໄດ້ຈັດສັນດິນ ໃນ 7 ຕົວເມືອງ ລວມມີ 200 ບ້ານ ມີເນື້ອທີ່ ທັງໝົດ 95.064,62 ຮ.ຕ ສຳເລັດ 100%.

• **ດ້ານການ ພັດທະນາ ຊົນນະບົດ, ລຶບລ້າງ ຄວາມທຸກຍາກ.**

ພາຍຫລັງມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ, ປະຕິບັດຄຳສັ່ງ ເລກທີ 010/ນຍ ວ່າ ດ້ວຍການສ້າງແຜນງານ ລຶບລ້າງຄວາມທຸກຍາກ ນະຄອນຫລວງວຽງຈັນ ໄດ້ຈັດຕັ້ງການສຳ ຫລວດຄອບຄົວທຸກຍາກຕາມ 5 ມາດຖານ, ຊຶ່ງຜົນການສຳຫລວດມີຄອບຄົວທຸກຍາກ ທັງໝົດ 2,332 ຄອບຄົວ ເທົ່າກັບ 2,2% ຂອງຈຳນວນ 106.369 ຄອບຄົວ ທີ່ຖືກສຳຫລວດ. ຫລັງຈາກ ນັ້ນ, ນະຄອນຫລວງວຽງຈັນ ກໍ່ໄດ້ມີວິທີ ແກ້ໄຂຄວາມທຸກຍາກ ດັ່ງນີ້: ຈັດພູມລຳເນົາ, ສຸມທຶນ ຮອນ ເຂົ້າໃນການກໍ່ສ້າງ ພື້ນຖານໂຄງລ່າງຮອບດ້ານ. ມາຮອດປີ 2005 ປະຕິບັດແຜນການໄດ້ 90% ຂອງແຜນການທີ່ໄດ້ວາງອອກ.

• **ວຽງງານ ການສ້າງຕັ້ງກອງທຶນ ພັດທະນາ.**

ໄດ້ເອົາໃຈໃສ່ປຸກລະດົມທຸກພາກສ່ວນເສດຖະກິດ, ອົງການຈັດຕັ້ງຕ່າງໆໃຫ້ປະກອບສ່ວນ ວັດຖຸປັດໄຈຂອງຕົນແກ່ການພັດທະນານະຄອນຫລວງ. ປະຈຸບັນນີ້, ທົ່ວນະຄອນຫລວງວຽງຈັນ ມີກອງທຶນ ຊຶ່ງມີມູນຄ່າທັງໝົດ 18.473, 06 ລ້ານກີບ.

• **ດ້ານ ອຸດສາຫະກຳ ແລະ ຫັດຖະກຳ.**

ໃນຂົງເຂດອຸດສາຫະກຳ ແລະ ຫັດຖະກຳ ໄລຍະປີ 2001-2005 ກໍ່ໄດ້ມີການຂະຫຍາຍ ຕົວ ຊຶ່ງມີໂຮງງານອຸດສາຫະກຳ ແລະ ຫັດຖະກຳ ທັງໝົດ 1.803 ແຫ່ງ, ມີຈຳນວນກຳມະກອນ ທັງໝົດ 31.284 ຄົນ, ທຽບໃສ່ປີ 2000 ຈຳນວນໂຮງງານ ເພີ່ມຂຶ້ນ 439 ແຫ່ງ ຫລື ເທົ່າກັບ 32,18%, ມີມູນຄ່າການລົງທຶນ ອຸດສາຫະກຳ ທັງໝົດ 1.240.052 ຕື້ກີບ. ໃນນັ້ນ, ໂຮງງານທີ່ ເປັນການລົງທຶນຂອງຕ່າງປະເທດ ມີ 110 ແຫ່ງ, ມີມູນຄ່າເທົ່າກັບ 772,70 ຕື້ກີບ ຫລື ເທົ່າກັບ 62,30% ຂອງມູນຄ່າການລົງທຶນທັງໝົດ.





ຜະລິດຕະພັນ ເຄື່ອງຫັດຖະກຳ ທີ່ຜະລິດ ແລະ ຈຳໜ່າຍ ຢູ່ນະຄອນຫລວງວຽງຈັນ

• **ດ້ານພື້ນຖານໂຄງລ່າງເສດຖະກິດ.**

ໃນຊຸມປີຜ່ານມາ (2001-2005) ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ປັບປຸງຍົກລະດັບ ແລະ ກໍ່ສ້າງເສັ້ນທາງສາຍຕ່າງໆ ເຮັດໃຫ້ການຄົມມະນາຄົມຂົນສົ່ງ ສັນຈອນໄປມາສະດວກສະ ບາຍດີຂຶ້ນກວ່າເກົ່າ. ມາຮອດປີ 2005 ທົ່ວ ນະຄອນຫລວງວຽງຈັນ ມີທາງປູຢາງ 422,50 ກິໂລ ແມັດ, ທຽບໃສ່ປີ 2000 - 2001 ທາງປູຢາງ ເພີ່ມຂຶ້ນ 76, 85 ກິໂລແມັດ.

ໃນຊຸມປີ 2001 - 2005 ຜ່ານມາ ບໍລິມາດການ ຂົນສົ່ງສິນຄ້າ ແຕ່ລະປະເພດກໍ່ໄດ້ມີການ ເພີ່ມຂຶ້ນຢ່າງໄວວາ ເຊັ່ນ:

- ບໍລິມາດ ຂົນສົ່ງສິນຄ້າ ປະຕິບັດໄດ້ທັງໝົດ 1.185.072 ໂຕນ.
- ບໍລິມາດ ຂົນສົ່ງໂດຍສານ ປະຕິບັດໄດ້ 71.903.749 ເທື່ອຄົນ.
- ບໍລິມາດ ສັນຈອນສິນຄ້າ 66.121.245 ໂຕນ/ກິໂລແມັດ.
- ບໍລິມາດ ສັນຈອນໂດຍສານ ປະຕິບັດໄດ້ 2.190.139.208 ຄົນ/ກິໂລແມັດ.

• **ວຽກງານ ພັດທະນາ ແລະ ບໍລິຫານຕົວເມືອງ.**

ໄດ້ເອົາໃຈໃສ່ໃນການພັດທະນາຕົວເມືອງ ເປັນຕົ້ນແມ່ນ ການສ້າງທາງຊອຍ ປັບປຸງ ແລະ ກໍ່ສ້າງຮ່ອງລະບາຍນ້ຳ, ສວນສາທາລະນະ, ອານາໄມ ແລະ ປະດັບປະດາຕົວເມືອງ, ສະແດງ ອອກ ຮອດທ້າຍປີ 2005 ກໍ່ສ້າງທາງ ໄດ້ທັງໝົດ 17 ເສັ້ນ, ຍາວ 15.217 ແມັດ; ໃນນັ້ນສຳເລັດ 100% ມີ10 ເສັ້ນ, ຍາວ 7.461 ແມັດ, ຮ່ອງລະບາຍນ້ຳ 3 ສາຍ, ຍາວ 1.973 ສຳເລັດ100%.

• **ດ້ານການລົງທຶນ ແລະ ພົວພັນຮ່ວມມື:**

ແຕ່ປີ 2001 - 2005 ນະຄອນຫລວງວຽງຈັນ ໄດ້ຮັບອະນຸມັດທຶນ ເພື່ອພັດທະນາເສດຖະ ກິດ - ສັງຄົມ ທັງໝົດ 1.590 ໂຄງການ ມີມູນຄ່າທັງໝົດ 977, 00 ຕື້ກີບ; ໃນນັ້ນ ທຶນພາຍໃນ 442, 03 ຕື້ກີບ, ທຶນຕ່າງປະເທດ 534,97 ຕື້ກີບ, ທຽບໃສ່ປີ 1996 -2000 ເພີ່ມຂຶ້ນ 4,5 ເທື່ອ, ທຶນພາຍໃນ ເພີ່ມຂຶ້ນ 4,43 ເທື່ອ. ນອກນັ້ນ, ຍັງມີການປະກອບສ່ວນ ຂອງປະຊາຊົນ ຈຳນວນ 11 ໂຄງການ, ມີມູນຄ່າທັງໝົດ 645 ລ້ານກີບ ແລະ ສູນການໂອນໃຫ້ຕື່ມ 90 ໂຄງການ, ມີ ມູນຄ່າ 21 ຕື້ກີບ.

ໃນດ້ານການພົວພັນຮ່ວມມື, ນະຄອນຫລວງວຽງຈັນ ໄດ້ຕັ້ງໜ້າເສີມຂະຫຍາຍສາຍພົວ ພັນແບບພິເສດ ຮອບດ້ານກັບຫວຽດນາມ ແລະ ຈີນ, ນັບແຕ່ປີ 2001- 2004 ສະເລ່ຍ ແຕ່ລະປີ ຄະນະຜູ້ແທນຂັ້ນຕ່າງໆ ໄປຢ້ຽມຢາມ ຊຶ່ງກັນ ແລະ ກັນ 3 ຫາ 4 ຄັ້ງ. ພ້ອມກັນນັ້ນ, ກໍ່ໄດ້ຍາດ ແຍ່ງເອົາການຊ່ວຍເຫລືອລ້າ, ກູ້ຢືມ ຈາກຕ່າງປະເທດ ເພື່ອປະກອບສ່ວນເຂົ້າ ໃນການພັດທະ ນາເສດຖະກິດ - ສັງຄົມ ຊຶ່ງມີທັງໝົດ 319 ໂຄງການ, ມີມູນຄ່າ 149, 96 ລ້ານໂດລາ ສະຫະ ລັດ, ທຽບໃສ່ປີ 1996 - 2000 ເພີ່ມຂຶ້ນ 2 ເທື່ອ. ໃນນັ້ນ, ກູ້ຢືມ 45 ໂຄງການ, ມູນຄ່າ 95, 43 ລ້ານໂດລາ ແລະ ຊ່ວຍເຫລືອລ້າ 274 ໂຄງການ, ມີມູນຄ່າ 54,48 ລ້ານໂດລາ.

ການລົງທຶນຂອງລັດ ແລະ ຕ່າງປະເທດ ເຂົ້າໃນແຕ່ລະຂະແໜງການ ເສດຖະກິດ-ສັງຄົມ ຂອງ ນະຄອນຫລວງວຽງຈັນ ແຕ່ປີ 2001 - 2005 ມີດັ່ງນີ້:

+ ຂະແໜງ ກະສິກຳ - ປ່າໄມ້ ມີຈຳນວນການລົງທຶນ ທັງໝົດ 1.012.033,62 ລ້ານກີບ. ໃນນັ້ນ, ທຶນພາຍໃນ 442,034 ລ້ານກີບ, ທຶນຕ່າງປະເທດ 569, 999, 62 ລ້ານກີບ, ເພີ່ມຂຶ້ນ 5.03; 4.87; 5.18 ເທື່ອ.

+ ຂະແໜງ ອຸດສາຫະກຳ-ຫັດຖະກຳ ມີຈຳນວນທຶນ ທັງໝົດ 257.495,85 ລ້ານກີບ, ໃນ ນັ້ນ, ມີທຶນພາຍໃນປະເທດ 235.809,68 ລ້ານກີບ, ທຶນຕ່າງປະເທດ 21680,17 ລ້ານກີບ.

• ດ້ານການສຶກສາ.

ວຽກງານການສຶກສາ ໄດ້ມີທ່າຂະຫຍາຍຕົວນັບທັງປະລິມານ ແລະ ຄຸນນະພາບ, ປະຕິບັດ ການສຶກສາ ພາກບັງຄັບສົມທົບກັບການປະຕິບັດ 3 ແຜນງານການສຶກສາຢ່າງຕັ້ງໜ້າ. ມາຮອດ ປີ 2005, ທົ່ວນະຄອນຫລວງວຽງຈັນ ມີໂຮງຮຽນແຕ່ຂັ້ນອານຸບານ ເຖິງມັດທະຍົມປາຍ ທັງພາກ ລັດ ແລະ ເອກະຊົນ ທັງໝົດ 739 ແຫ່ງ, ທຽບໃສ່ປີ 2001 ເພີ່ມຂຶ້ນ 61 ແຫ່ງ, ມີນັກຮຽນ ທັງ ໝົດ 161.716 ຄົນ, ມີຄູອາຈານ ທັງໝົດ 6.008 ຄົນ. ນອກນັ້ນ, ວຽກງານສາມັນສຶກສາ ຍັງໄດ້ ເອົາໃຈໃສ່ການສຶກສານອກລະບົບ ໂດຍສະເພາະ ວຽກງານລຶບລ້າງການກຶກໜັງສື, ຍົກລະດັບ ການສຶກສາໃຫ້ພະນັກງານ, ປະຊາຊົນ ແລະ ຝຶກອົບຮົມໃຫ້ປະຊາຊົນ, ຊາວໜຸ່ມ ແລະ ຜູ້ດ້ອຍ ໂອກາດ ໄດ້ທັງໝົດ 2. 854 ຄົນ.

• ດ້ານກິລາກາຍະກຳ.

ໄດ້ເອົາໃຈໃສ່ ສົ່ງເສີມກິລາມວນຊົນ ຢ່າງກວ້າງຂວາງ, ໂດຍສະເພາະແມ່ນ ໄດ້ເອົາຫລັກ ສູດກິລາ ກາຍະກຳເຂົ້າໃນການຮຽນ - ການສອນ ຢູ່ບັນດາໂຮງຮຽນ ນັບແຕ່ຂັ້ນປະຖົມຈົນຮອດ ຂັ້ນມັດທະຍົມ ເພື່ອຄັດເລືອກເອົານັກກິລາ ທີ່ມີພອນສະຫວັນ ທາງດ້ານກິລາ ເຂົ້າເປັນກິລາສົບ ທອດ. ສະແດງອອກໃນມະຫາກຳກິລາ ຄັ້ງທີ VI ນະຄອນຫລວງວຽງຈັນ ໄດ້ຄັດເລືອກເອົານັກ ກິລາ ເຂົ້າຮ່ວມແຂ່ງຂັນ 22 ປະເພດ ແລະ ສາມາດຍາດໄດ້ຫລຽນ ທັງໝົດ 136 ຫລຽນ; ນະ ຄອນຫລວງວຽງຈັນ ໄດ້ສົ່ງນັກກິລາບານເຕະ ອາຊຽນ ລຸ້ນອາຍຸບໍ່ເກີນ 14 ປີ ໃນເດືອນ 3 ປີ 2003 ຢູ່ບາງກອກ ແລະ ໄດ້ຄອງຊະນະເລີດ.

• ວຽກງານສາທາລະນະສຸກ.

ວຽກງານນີ້ ໄດ້ຖືວ່າແມ່ນວຽກງານສຳຄັນແຖວໜ້າ. ດັ່ງນັ້ນ, ແຕ່ປີ 2001-2005, ບັນດາ ຄະນະນຳຂອງ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຊີ້ນຳ - ນຳພາ ຢ່າງເປັນປະຈຳ ຕໍ່ວຽກງານ ນີ້ເຊັ່ນ: ການຈັດຫານ້ຳສະອາດ, ສັກຢາປ້ອງກັນພະຍາດ, ຮັກສາສຸຂະພາບແມ່ແລະເດັກ, ຄວບ ຄຸມພະຍາດມັກລະບາດຕາມລະດູການ ແລະ ອື່ນໆ... ສາມາດສະຫລຸບໄດ້ວ່າ: ວຽກງານສາທາ ລະນະສຸກຂອງ ນະຄອນຫລວງວຽງຈັນ ໄດ້ຮັບການບໍລິການດີຂຶ້ນຄື:

- ອັດຕາການ ຊົມໃຊ້ນ້ຳສະອາດ ຂອງປະຊາຊົນ ກວມ 88,77%.
- ອັດຕາ ຊົມໃຊ້ສ້ວມຖ່າຍ ຂອງປະຊາຊົນ ກວມ 80,46% .
- ອັດຕາ ສັກຢາກັນພະຍາດ ເດັກອາຍຸ ຕ່ຳກວ່າ 1 ປີ ກວມ 70,50%.
- ອັດຕາ ສັກຢາກັນພະຍາດ ບາດທະຍັກ ໃຫ້ແມ່ຍິງ 15 - 49 ປີ ກວມ 54, 04 %.
- ອາຍຸຢືນ ສະເລ່ຍເພີ່ມຂຶ້ນ ຈາກ 58 ປີ ມາເປັນ 62 ປີ.
- ບໍລິການ ກວດພະຍາດ ເຂດນອກ ທັງໝົດ 253.124 ຄົນ, ປິ່ນປົວຄົນນອນ ໂຮງໝໍ 37.930 ເທື່ອຄົນ.

• ວຽກງານຖະແຫລງຂ່າວ- ວັດທະນະທຳ.

ແຕ່ຊຸມປີ 2001 - 2005, ວຽກງານຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ, ໂດຍສະເພາະ ແມ່ນໄດ້ໂຄສະນາເຜີຍແຜ່ແນວທາງການເມືອງຂອງພັກ, ລະບຽບກົດໝາຍຂອງລັດ, ບົດສາລະຄະດີຄົນເດັ່ນ, ບົດຮຽນຕົວແບບ ແລະ ສະພາບການຕ່າງໆ ທີ່ພົ້ນເດັ່ນຂອງສັງຄົມ. ພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ອານຸລັກ ວັດທະນະທຳ ອັນດີງາມຂອງຊາດ ກໍ່ຄືຂອງຊາວ ນະຄອນຫລວງວຽງຈັນ ເປັນຢ່າງດີ, ຮີດຄອງປະເພນີ, ສະຖານທີ່ປູສະນີຍະສະຖານອັນເກົ່າແກ່ ເຊັ່ນ: ຫໍພະແກ້ວ, ວັດສີສະເກດ, ພະທາດຫລວງ, ກຳແພງເມືອງວຽງຈັນ ບູຮານ ຊັ້ນ 3 ແລະ ຮ່ອງຮອຍ ປະຫວັດສາດ ອື່ນໆ ໄດ້ເປັນຢ່າງດີ.

• ດ້ານແຮງງານ ແລະ ສະຫວັດດີການ - ສັງຄົມ.

ໃນ 5 ປີຜ່ານມາ (2001 - 2005), ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຊຸກຍູ້ໃຫ້ພາກສ່ວນຕ່າງໆ ປະຕິບັດກົດໝາຍແຮງງານຢ່າງຖືກຕ້ອງ ແລະ ຄົບຖ້ວນ ໂດຍໄດ້ຊຸກຍູ້ໃຫ້ມີການສ້າງຕັ້ງ ບໍລິສັດ ຈັດຫາງານ ແລະ ຄຸ້ມຄອງແຮງງານຕ່າງປະເທດ 1 ບໍລິສັດ, ຊຶ່ງສາມາດຈັດຫາງານຢູ່ພາຍໃນ ໄດ້ 200 ຄົນ. ພ້ອມກັນນັ້ນ, ກໍ່ໄດ້ຝຶກອົບຮົມສີມືແຮງງານແບບກັບທີ່ ແລະ ເຄື່ອນທີ່ໃຫ້ແກ່ຜູ້ທີ່ບໍ່ມີວິຊາອາຊີບ ໄດ້ 1.096 ຄົນ; ປະຕິບັດນະໂຍບາຍຕໍ່ພະນັກງານບຳນານ, ຜູ້ເສຍອົງຄະ, ເດັກກຳພ້າ, ເດັກດ້ອຍໂອກາດ, ຜູ້ປະສົບໄພພິບັດ ແລະ ຜູ້ເຖົ້າປ່ຽວພອຍ ຊຶ່ງລວມເປັນມູນຄ່າທັງໝົດ 1.110 ລ້ານກີບ. ນອກນັ້ນ, ຍັງມີເຮືອນ 18 ຫລັງ ແລະ ລົດ 23 ຄັນ.

ເວົ້າລວມແລ້ວບັນດາຜົນງານ ແລະ ໄຊຊະນະ ທີ່ຍາດມາໄດ້ນັ້ນ, ແມ່ນຍ້ອນໄດ້ເຊື່ອມຊຶມກຳແໜ້ນແນວທາງປ່ຽນແປງໃໝ່ຂອງພັກ, ມະຕິ ກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ນະຄອນຫລວງວຽງຈັນ, ໂດຍນະຄອນຫລວງວຽງຈັນ ໄດ້ຫັນເອົາແນວທາງ ແຜນນະໂຍບາຍຂະຫຍາຍໃຫ້ກາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ສອດຄ່ອງກັບສະພາບຄວາມເປັນຈິງຂອງ ນະຄອນຫລວງວຽງຈັນ; ກາຍເປັນຄວາມຮັບຜິດຊອບຂອງ ອົງຄະນະພັກ ແລະ ອຳນາດການປົກຄອງແຕ່ລະຂັ້ນ. ປະຊາຊົນບັນດາເຜົ່າ ຊາວນະຄອນຫລວງວຽງຈັນ ໄດ້ເຊີດຊູນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ທັງຮູ້ປະ



ທ່ານ ທອງສິງ ທຳມະວົງ
ກຳມະການກົມການເມືອງສູນ
ກາງພັກ, ເລຂາຄະນະພັກ,
ເຈົ້າຄອງນະຄອນຫຼວງວຽງຈັນ.
ປີ 2001 - 2006

ສາມສິມທິບຢ່າງກົມກຽວ ລະຫວ່າງ ກຳລັງແຮງສັງລວມພາຍໃນ ກັບການສະໜັບສະໜູນ ຈາກເພື່ອນມິດ ແລະ ອົງການຈັດຕັ້ງສາ ກົນຢ່າງມີປະສິດທິຜົນ.

ໄປພ້ອມກັບວຽກງານປັບປຸງ ການຈັດຕັ້ງລະບົບການເມືອງ ຕະຫລອດໄລຍະແຫ່ງການສ້າງສາພັດທະນາ ນະຄອນຫລວງ, ໃຕ້ ການຊີ້ນຳ - ນຳພາຂອງອົງຄະນະພັກ, ອຳນາດການປົກຄອງ, ປະ ຊາຊົນ ບັນດາເຜົ່າ ໄດ້ກ້າວສູ່ສັງການໃໝ່ ດ້ວຍບາດກ້າວອັນໜັກ ແໜ້ນ, ປັບປຸງບັນດາຮາກຖານການເມືອງ, ເສດຖະກິດ - ສັງຄົມ, ແຂ່ງຂັນກໍ່ສ້າງກຸ່ມບ້ານພັດທະນາ ເຊັ່ນ: ບ້ານວັດທະນະທຳ, ບ້ານ ປອດຄະດີ, ບ້ານສາມສະອາດ... ຈາກໝາກຜົນ ບາດກ້າວທຳອິດ ໃນການປັບປຸງ ແລະ ບູລະນະລະບອບ ປະຊາທິປະໄຕ ປະຊາຊົນ ລາວ ກ້າວຂຶ້ນຕາມທິດສັງຄົມນິຍົມ ໄປສູ່ໄລຍະແຫ່ງການປ່ຽນແປງໃໝ່ຮອບດ້ານ ແລະ ມີຫລັກ ການຂອງພັກ ໃນກາງປີ2001 ໂດຍປະຕິບັດຕາມທິດທາງກໍ່ສ້າງ ນະຄອນຫລວງ ຂອງກົມການ ເມືອງສູນກາງພັກ ໄດ້ມີມະຕິສືບຕໍ່ປັບປຸງລະບົບການປົກຄອງ ປະຊາຊົນ ສະບັບເພີ່ມເຕີມອອກ ໂດຍໄດ້ບິ່ງຕົວແຕ່ງຕັ້ງເອົາ **ທ່ານ ທອງສິງ ທຳມະວົງ** ກຳມະການກົມ ການເມືອງສູນກາງພັກມາ ເປັນເລຂາ ຄະນະພັກ ນະຄອນຫລວງ, ສະຫາຍ ດຣ ສົມລະວົງ ຄຸດໄພທູນ ເປັນຮອງເລຂາຄະ ນະພັກ ແລະ ໄດ້ຍົກຍ້າຍ ສະຫາຍ ບຸນເຮືອງ ດວງພະຈັນ ໄປເປັນເລຂາຄະນະພັກ ທັງເປັນເຈົ້າ ແຂວງ, ແຂວງ ຫລວງພະບາງ. ພ້ອມນັ້ນ, ຢູ່ບັນດາເມືອງໃນ ນະຄອນຫລວງວຽງຈັນ ກໍ່ໄດ້ຮັບ ການປັບປຸງໃໝ່ອີກ.

ວັນທີ 27/2/2007 ຄະນະຈັດຕັ້ງ ນະຄອນຫລວງວຽງຈັນ ໄດ້ຈັດຕັ້ງກອງປະຊຸມວຽກງານ ຈັດຕັ້ງກໍ່ສ້າງພະນັກງານຂຶ້ນ, ໂດຍການເປັນປະທານຂອງ ທ່ານ ບຸນທ່ຽງ ຂຸນສີ, ມີ ທ່ານ ສົມບັດ ເຢຍລີເຮີ ຄະນະເລຂາທິການສູນກາງພັກ ເຂົ້າຮ່ວມ, ທ່ານ ດຣ ສົມລະວົງ ຄຸດໄພທູນ ເລຂາຄະ ນະພັກ ນະຄອນຫລວງ ເຈົ້າຄອງນະຄອນຫລວງ; ກອງປະຊຸມ ໄດ້ຕີລາຄາວຽກງານຈັດຕັ້ງພັກ - ພະນັກງານ ແຕ່ປີ 1991 - 2006 ແລະ ແຜນການພັດທະນາສະເພາະໜ້າ (2007- 2010 - 2020). ຮອດປີ 2001 ນະຄອນຫລວງວຽງຈັນ ໄດ້ມີໜ່ວຍພັກ 636 ໜ່ວຍ (ປັດຈຸບັນ ມີ 761 ໜ່ວຍ) ມີໜ່ວຍພັກແຂງ 391 ໜ່ວຍເທົ່າກັບ 41,96%, ມີໜ່ວຍພັກແຂງທຳມະດາ 95 ໜ່ວຍ, ໜ່ວຍພັກກາງ 115 ໜ່ວຍ, ບໍ່ໄດ້ຈັດປະເພດ 234 ໜ່ວຍ; ນະຄອນຫລວງວຽງຈັນ ມີສະມາຊິກ ພັກ ທັງໝົດ 10198 ຄົນ, ຍິງ 241 ຄົນ, ນັບແຕ່ປີ 2006 ນະຄອນຫລວງວຽງຈັນ ໄດ້ມີການຂະ ຫຍາຍສະມະຊິກ ເພີ່ມຂຶ້ນ 596 ຄົນ,ຍິງ 180 ຄົນ ສາມາດລົບລ້າງບ້ານຂາວ ໄດ້ 15 ບ້ານ ຍັງ ເຫລືອພຽງ 2 ບ້ານ ທີ່ຍັງບໍ່ທັນມີໜ່ວຍພັກນຳພາ.

ວັນທີ 8/2/2007 ອົງການທ່ອງທ່ຽວ ນະຄອນຫລວງວຽງຈັນ ໄດ້ຈັດກອງປະຊຸມກ່ຽວກັບ ການປັບປຸງ ແລະ ພັດທະນາການທ່ອງທ່ຽວ ນະຄອນຫລວງວຽງຈັນ ໂດຍການເຂົ້າຮ່ວມຂອງ ທ່ານ ສົມວັນດີ ນາຖາວົງ ຮອງເຈົ້າ ຄອງນະຄອນຫລວງ, ທ່ານ ດຣ ສີລາພູມ ທະລາວົງ ຮອງປະ ທານອົງການທ່ອງທ່ຽວແຫ່ງຊາດ, ມີບັນດາພະນັກງານ, ນັກທຸລະກິດການທ່ອງທ່ຽວເຂົ້າຮ່ວມ ໃນກອງປະຊຸມ ໄດ້ສັງເກດຕີລາຄາຂົງເຂດທຸລະກິດ ການທ່ອງທ່ຽວ ໃນປີຜ່ານມາ ໃນດ້ານການ ບໍລິການ ແລະ ການພັດທະນາ ລວມເຖິງການປົກປັກຮັກສາ ແຫລ່ງນ້ຳທຳມະຊາດ - ວັດທະນະ ທຳ; ບົດລາຍງານ ຍັງໄດ້ສະເໜີແຈ້ງຕົວເລກສະຖິຕິ ນັກທ່ອງທ່ຽວຢູ່ເມືອງລາວ ໃນປີ 2006 ນີ້ ມີນັກທ່ອງທ່ຽວເຂົ້າ ນະຄອນຫລວງວຽງຈັນ ເຖິງ 729272 ຄົນ ທຽບໃສ່ປີ 2005 ເພີ່ມຂຶ້ນ 11,64%, ມີ ໂຮງແຮມ 47 ແຫ່ງ 2885 ຫ້ອງນອນ, ມີເຮືອນພັກ 168 ແຫ່ງ 2457 ຫ້ອງ, ມີ ຮ້ານອາຫານລະດັບສາກົນ 64 ແຫ່ງ, ມີແຫລ່ງທ່ອງທ່ຽວ 37 ແຫ່ງ, ເຮືອນຳທ່ຽວ 3 ລຳ...

ຂ. ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ IV (ວັນທີ 19 - 21/8/ 2005).

ປີ 2005 ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ IV ໄດ້ໄຂຂຶ້ນ. ພາຍໃຕ້ການເປັນປະທານຂອງ **ທ່ານ ທອງສິງ ທຳມະວົງ** ກຳມະການ ກົມການເມືອງສູນກາງ ພັກ, ເລຂາຄະນະພັກ, ເຈົ້າຄອງ ນະຄອນຫລວງວຽງຈັນ ມີຜູ້ແທນເຂົ້າຮ່ວມ ທັງໝົດ 217 ສະ ຫາຍ, ທີ່ເປັນຕົວແທນໃຫ້ແກ່ ສະມາຊິກພັກ ໃນທົ່ວ ນະຄອນຫລວງ 8800 ກວ່າສະຫາຍ. ໃນ ນັ້ນມີຜູ້ແທນສົມບູນ 214 ສະຫາຍ, ຜູ້ແທນບົ່ງຕົວ 3 ສະຫາຍ, ເປັນຍິງ 9 ສະຫາຍ. ຊຶ່ງມາຈາກ ຂະແໜງການອ້ອມຂ້າງ 66 ສະຫາຍ, ມາຈາກ 9 ຕົວເມືອງ 103 ສະຫາຍ, ມາຈາກກຳລັງປ້ອງ ກັນຊາດ - ປ້ອງກັນຄວາມສະຫງົບ 17 ສະຫາຍ ແລະ ມາຈາກຫົວໜ່ວຍທຸລະກິດ 9 ສະຫາຍ. ກອງປະຊຸມໃຫຍ່ ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງນີ້, ໄດ້ເປັນກຽດຕ້ອນຮັບ ທ່ານ ຈູມ ມະລີ ໄຊຍະສອນ ກຳມະການ ກົມການເມືອງສູນກາງພັກ ເລຂາທິການໃຫຍ່ ຄະນະບໍລິຫານ ງານສູນກາງພັກ ປະຊາຊົນ ປະຕິວັດລາວ ຮອງປະທານປະເທດ, ຜູ້ປະຈຳການກົມການເມືອງ (ປະທານປະເທດ ແຫ່ງ ສປປ ລາວ ປະຈຸບັນ).

ກອງປະຊຸມໃຫຍ່ອົງຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ IV ໄດ້ທົບທວນຄືນ ການ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງຕົນ ແລະ ໄດ້ກຳນົດທິດທາງໜ້າທີ່ຍຸດທະ ສາດ ໄລຍະແຕ່ນີ້ຮອດປີ 2020 ແລະ ໜ້າທີ່ຈຸດສຸມ ຂອງອົງຄະນະພັກ ໃນ 5 ປີຕໍ່ໜ້າ ຄື່ດັ່ງນີ້:



ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ

1. ພວກເຮົາ ໄດ້ຍູ້ແຮງການພັດທະນາ ເສດຖະກິດ ຕາມແຜນນະໂຍບາຍປ່ຽນແປງໃໝ່ ຂອງພັກ, ເຮັດໃຫ້ ນະຄອນຫລວງວຽງຈັນ ມີຫລາຍພາກສ່ວນເສດຖະກິດ ໄດ້ຮັບການຟື້ນຟູບົນ ພື້ນຖານ ກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ ແລະ ມີຄວາມສະຫງົບປົກກະຕິຂະຫຍາຍ ຕົວໃນລະດັບທີ່ດີຢ່າງຕໍ່ເນື່ອງ ເປັນຕົ້ນ ການຜະລິດເຂົ້າຂອງຊາວກະສິກອນ, ໂຮງຈັກ, ໂຮງງານ ປຸງແຕ່ງກະສິກຳ ໄດ້ເພີ່ມຂຶ້ນທາງດ້ານຈຳນວນ ແລະ ຄຸນນະພາບ, ການຄ້າ, ທ່ອງທ່ຽວ ກໍ່ມີປັດ ໄຈໃໝ່ຫຼາຍຢ່າງ. ສະເພາະການທ່ອງທ່ຽວ ປີ 1999 - 2000 ຢູ່ນະຄອນຫລວງວຽງຈັນ ກໍຄືຢູ່ໃນ ທົ່ວປະເທດເປີດປີທ່ອງທ່ຽວລາວຂຶ້ນ. ນອກນັ້ນ, ໂຄງການພັດທະນາ ເສດທະກິດອື່ນ ກໍ່ມີການ ຂະຫຍາຍຕົວ ດ້ວຍຈັງຫວະໄວ ແລະ ແຂງແຮງ ເຮັດໃຫ້ ນະຄອນຫຼວງວຽງຈັນ ມີຄວາມຈະເລີນ ກ້າວໜ້າໃນບາດກ້າວທີ່ສຳຄັນ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປົວແປງດີຂຶ້ນ.

ພວກເຮົາໄດ້ເອົາໃຈໃສ່ປະຕິບັດນະໂຍບາຍ ແລະ ກົນໄກຄຸ້ມຄອງເສດຖະກິດຂອງລັດ ຖະບານ. ໄດ້ເພີ່ມທະວີບົດບາດການນຳພາຂອງພັກ, ຄວາມສັກສິດຂອງລັດ ເຂົ້າໃນການກໍ່ສ້າງ ເສດຖະກິດ ຕາມກົນໄກຕະຫລາດ, ປະຕິບັດລະບອບລະບຽບ ແລະ ນະໂຍບາຍຕ່າງໆ ດ້ານ ເສດຖະກິດ, ປັບປຸງຂອດການວາງແຜນການ ແລະ ການລົງທຶນຂອງລັດ, ຊຶ່ງໃນ 5 ປີ ມີທັງໝົດ 1.590 ໂຄງການ ມູນຄ່າ 977 ຕື້ກີບ ໃນນັ້ນ ທຶນພາຍໃນ 442 ຕື້ກີບ, ທຶນຕ່າງປະເທດ 534,97 ຕື້ກີບ ທຽບໃສ່ແຜນການ 5 ປີແຫ່ງລັດ ຄັ້ງທີ IV ເພີ່ມຂຶ້ນ 4 ຫາ 5 ເທື່ອ.

ໄດ້ຕັ້ງໜ້າປະຕິບັດນະໂຍບາຍ ເສດຖະກິດຫລາຍພາກສ່ວນ, ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ຕັ້ງໜ້າເຂົ້າຮ່ວມພັດທະນາເສດຖະກິດ - ສັງຄົມ ຢ່າງສະເໝີຕົ້ນສະເໝີປາຍ, ຊຸກຍູ້ການຫັນເສດຖະກິດ ທຳມະຊາດ ໄປສູ່ການຜະລິດສິນຄ້າ ເອົາໃຈໃສ່ປັບປຸງ ການຈັດຕັ້ງ ແລະ ກົນໄກເຄື່ອນໄຫວທຸລະກິດ ຂອງພາກສ່ວນເສດຖະກິດຂອງລັດ. ໄດ້ຕັ້ງໜ້າສົ່ງເສີມເສດຖະກິດຮ່ວມມືຂອງປະຊາຊົນ, ພາກສ່ວນເສດຖະກິດອື່ນໆ ໃຫ້ເຄື່ອນໄຫວເສລີ ຖືກກົດໝາຍ, ອັນໄດ້ເຮັດໃຫ້ທ່າແຮງ ຄວາມອາດສາມາດບົ່ມຊ້ອນ ຂອງທ້ອງຖິ່ນ ຖືກຂຸດຄົ້ນກວ້າງຂວາງກວ່າເກົ່າ ແລະ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊຶ່ງເພີ່ມຂຶ້ນ ສະເລ່ຍ 9,79% ລາຍຮັບສະເລ່ຍຕໍ່ຫົວຄົນ ໄດ້ 953 ໂດລາ ຕໍ່ຄົນຕໍ່ປີ.




ທົ່ງນາແຫ່ງໜຶ່ງ ຂອງປະຊາຊົນຊາວ ນະຄອນຫລວງວຽງຈັນ

ໄດ້ເອົາໃຈໃສ່ສົ່ງເສີມການກະສິກຳ - ປ່າໄມ້ຢ່າງຮອບດ້ານ, ອັນພື້ນເດັ່ນແມ່ນ ການກໍ່ສ້າງສ້ອມແປງລະບົບ ຊົນລະປະທານ, ຂະຫຍາຍເນື້ອທີ່ນາແຊງ ເພີ່ມຂຶ້ນ 22,22% ທຽບໃສ່ປີ 2000. ສາມາດຜະລິດເຂົ້າກິນ ກຸ້ມຕົນເອງ ທັງມີສ່ວນແຮໄວ້, ສະເລ່ຍການຜະລິດເຂົ້າກິນ ໄດ້ 465 ກິໂລ ຕໍ່ຄົນຕໍ່ປີ. ການຜະລິດເປັນສິນຄ້າໃນຂົງເຂດ ກະສິກຳ - ປ່າໄມ້ ມີຫລາຍໜໍ່ແໜງໃໝ່ເກີດຂຶ້ນ ເຊັ່ນ: ການປູກອ້ອຍເຮັດນ້ຳຕານ, ເພີ່ມຂຶ້ນເກືອບ 2 ເທົ່ອ ທຽບໃສ່ ປີ 2000; ປູກສາລີ ເຮັດອາຫານສັດ ເພີ່ມຂຶ້ນ 57,5% ແລະ ປູກເຂົ້າຈ້າວ ສະໜອງໂຮງງານເບຍ ໄດ້ຢ່າງພຽງພໍຕາມຄວາມຕ້ອງການ. ການລ້ຽງສັດຂອງຄອບຄົວ ແລະ ກຸ່ມຄອບຄົວ ໃຫ້ເປັນສິນຄ້າ ນັບມື້

ເພີ່ມຂຶ້ນ ຄື: ຟາມລ້ຽງສັດ ເພີ່ມຂຶ້ນ 66%, ລ້ຽງປາໃນກະຊັງ ແລະ ການລ້ຽງປາໃສ່ໜອງ ເພີ່ມຂຶ້ນ 50%, ຜະລິດທາດຊີ້ນ ເພີ່ມຂຶ້ນ 52%, ເຮັດໂຄງການຜະລິດ ສະບຽງອາຫານ ຮັບໃຊ້ພາຍໃນໄດ້ຮັບປະກັນຢ່າງໜັກແໜ້ນ.


ຂະແໜງອຸດສະຫະກຳ - ຫັດຖະກຳ, ການບໍລິການມີທ່ວງທ່າຂະຫຍາຍຕົວເປັນກ້າວໆ, ປັດຈຸບັນມີ ໂຮງງານ ອຸດສະຫະກຳ ແລະ ຫັດຖະກຳ ທັງໝົດ1.803 ແຫ່ງ, ເພີ່ມຂຶ້ນ 32,18%, ລວມຍອດຜະລິດຕະພັນ ອຸດສະຫະກຳປຸງແຕ່ງ ຫັດຖະກຳ ເພີ່ມຂຶ້ນ 3 ເທື່ອ ທຽບໃສ່ປີ 2000, ສາມາດຕອບສະໜອງການຊົມໃຊ້ຢູ່ພາຍໃນ ແລະ ສົ່ງອອກຈຳນວນໜຶ່ງ, ໄດ້ຂະຫຍາຍຕາໜ່າງໄຟຟ້າອອກສູ່ຊົນນະບົດ, ມາຮອດປະຈຸບັນ ມີ 485 ບ້ານ ໄດ້ຊົມໃຊ້ໄຟຟ້າ ກວມ 98% ຂອງຈຳນວນບ້ານທັງໝົດ.



ບໍລິສັດ ເບຍລາວ ຢູ່ນະຄອນຫລວງວຽງຈັນ

ພວກເຮົາໄດ້ຕັ້ງໜ້າແກ້ໄຂບັນຫາການເງິນ ແລະ ງົບປະມານ, ປັບປຸງການບໍລິການ ດ້ານການເງິນແຕ່ຂັ້ນ ນະຄອນຫລວງ ລົງຮອດບ້ານ,ປະຕິບັດກົນໄກ ແລະ ນະໂຍບາຍລວມສູນງົບປະມານຂອງລັດຖະບານຢ່າງເຂັ້ມງວດ; ການຂຸດຄົ້ນລາຍຮັບເຂົ້າງົບປະມານ ໃນແຕ່ລະປີເພີ່ມຂຶ້ນ. ໃນສົກປີ 2003 - 2004, ສ້າງລາຍຮັບ ໄດ້ທັງໝົດ 682 ຕື້ກີບ, ລື່ນຄາດໝາຍ 2%. ສາມາດປະຕິບັດ ພັນທະໃຫ້ສູນກາງ ໄດ້ເປັນປົກກະຕິ ແລະ ທຽບໃສ່ສົກປີ 1999 - 2000 ເພີ່ມຂຶ້ນ 2,3 ເທື່ອ, ໄດ້ຮັບປະກັນລາຍຈ່າຍໂດຍທົ່ວໄປແມ່ນໄປຕາມແຜນງົບປະມານ, ໄດ້ກຳນົດ ແລະ ປະຕິບັດລະບອບປະຢັດມັດທະຍັດ, ຫລຸດຜ່ອນການໃຊ້ຈ່າຍ ບໍລິຫານ ທີ່ບໍ່ສົມເຫດສົມຜົນ.

ພວກເຮົາໄດ້ຕັ້ງໜ້າສົ່ງເສີມນະໂຍບາຍການ ແຂ່ງຂັນການຄ້າ, ນະໂຍບາຍຄ້າຂາຍແບບຫລາຍຝ່າຍ, ຊຸກຍູ້ພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມພັດທະນາ ທຸລະກິດການຄ້າ, ບໍລິການໃຫ້ຂະຫຍາຍຕົວຢ່າງກວ້າງຂວາງ. ປະຈຸບັນມີຫົວໜ່ວຍທຸລະກິດ ທັງໝົດ 17.711 ຫົວໜ່ວຍ, ທຽບໃສ່ປີ 2000 ເພີ່ມຂຶ້ນ 1,6 ເທື່ອ; ມີຕະຫລາດ 78 ແຫ່ງ, ເພີ່ມຂຶ້ນ 12 ແຫ່ງ, ອັດຕາສ່ວນໂຄງປະກອບຂອງການຄ້າ, ການບໍລິການ ເພີ່ມຂຶ້ນ 15% ປະກອບສ່ວນເຂົ້າ



ໂຮງງານຜະລິດ ເຫຼັກເສັ້ນ ຫລັກ 9 ນະຄອນຫລວງວຽງຈັນ



ໂຮງງານຜະລິດແປ້ງມັນຕົ້ນ

ໃນການແກ້ໄຂໄພເງິນເຟີ້ ຢູ່ໃນປະເທດຢ່າງຕັ້ງໜ້າ. ໄດ້ເອົາໃຈໃສ່ຄຸ້ມຄອງການນຳເຂົ້າ - ສົ່ງອອກສິນຄ້າ, ຕະຫລາດ, ລາຄາສິນຄ້າ ແລະ ເງິນຕາ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ແລະ ກົນໄກບໍລິການຜ່ານປະຕູດຽວ, ແນໃສ່ເພື່ອຊຸກຍູ້ຂະບວນການຜະລິດ ຂອງຊາວກະສິກອນ ນະຄອນຫລວງວຽງຈັນ ໃນໄລຍະໃໝ່ໃຫ້ເຂັ້ມແຂງ.

2. ໄດ້ເອົາໃຈໃສ່ພັດທະນາ ເຂດເທດສະບານເມືອງ, ຊານເມືອງ ແລະ ເມືອງອ້ອມຂ້າງ ໂດຍຕິດພັນກັບການ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ. ໄດ້ສຸມທຶນຮອນ ເຂົ້າໃນການພັດທະນາ ແລະ ບໍລິຫານ ຕົວເມືອງ, ປັບປຸງກໍ່ສ້າງພື້ນຖານໂຄງລ່າງ ດ້ານຄົມມະນາຄົມ - ໂທລະຄົມມະນາຄົມ ເປັນຕົ້ນ ການກໍ່ສ້າງ, ສ້ອມແປງເສັ້ນທາງຫລວງແຫ່ງຊາດ, ເສັ້ນທາງຊອຍໃນຕົວເມືອງ, ເສັ້ນທາງເຊື່ອມຕໍ່ຈາກຕົວເມືອງສູ່ຊົນນະບົດ ກໍ່ສ້າງສ້ອມແປງຕາຝັ່ງເຈື່ອນຖູກັນນ້ຳ, ຊຸກຍູ້ການເຮັດອະນາໄມຕົວເມືອງ, ເສັ້ນທາງຕະຄອງຮ່ອງນ້ຳ, ສຳຫລວດອອກແບບ ແລະ ກໍ່ສ້າງສວນສາທາລະນະຕ່າງໆ ປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ປະດັບຄຸ້ມຄອງການປຸກສ້າງຕາມຜັງເມືອງ; ລະບົບໂທລະຄົມມະນາຄົມ ແລະ ນ້ຳປະປາ ນັບມື້ຂະຫຍາຍກວ້າງອອກ ສາມາດຕອບສະໜອງຄວາມຕ້ອງການຈຳເປັນ ໄດ້ເປັນສ່ວນໃຫຍ່.

ໃນນັ້ນ, ໄດ້ຕັ້ງໜ້າປະຕິບັດ ແຜນນະໂຍບາຍ ຫລຸດຜ່ອນຄວາມທຸກຍາກຂອງ ພັກ - ລັດ ໂດຍໄດ້ຫັນ ພະນັກງານ, ມອບໝາຍໃຫ້ ອົງການ ຂອງນະຄອນຫລວງ, ເມືອງ ແລະ ໂຮງງານຕ່າງໆ ຮັບຜິດຊອບເປັນແຕ່ລະບ້ານ ແລະ ກຸ່ມຄອບຄົວ, ຂະຫຍາຍກອງທຶນ, ປະກາດລົບລ້າງຄວາມທຸກຍາກ, ຈັດສັນອາຊີບຄົງທີ່ ດ້ວຍມາດຕະການເຫລົ່ານັ້ນ ສາມາດລົບລ້າງ ເມືອງ ສັງທອງ ອອກຈາກບັນຊີເມືອງທຸກຍາກ ໃນປີ2004 ແລະ ແກ້ໄຂຄອບຄົວທຸກຍາກຈຳນວນ 2.332 ຄອບຄົວ ໄດ້ໂດຍພື້ນຖານ ໃນເດືອນ 7/ 2005. ພ້ອມກັນນັ້ນ, ກໍ່ໄດ້ປຸກລະດົມທຸກພາກສ່ວນເສດຖະກິດ, ບັນດາອົງການຈັດຕັ້ງສັງຄົມ ປະກອບສ່ວນທຶນຮອນ ເຂົ້າໃນກອງທຶນພັດທະນາ, ປະຈຸບັນທົ່ວ ນະຄອນຫລວງ ມີກອງທຶນແກ້ໄຂຄວາມທຸກຍາກ ທັງໝົດ 18.473,06 ລ້ານກີບ. ໃນນັ້ນ, ເດັ່ນກວ່າໝູ່ແມ່ນສະຫະກອນສິນເຊື່ອ ບ້ານ ສົງເປືອຍ (ເມືອງ ນາຊາຍທອງ), ກອງທຶນພັດທະນາ ບ້ານ ສົມສະຫວັນ (ເມືອງ ໄຊທານີ), ກອງທຶນຊ່ວຍເຫລືອຊຶ່ງກັນ ແລະ ກັນ ຂອງສະຫະພັນແມ່ຍິງ ຢູ່ບັນດາ ເມືອງ ແລະ ບ້ານ.



ນະຄອນຫລວງວຽງຈັນ

ສະຖານີລົດໄຟ ທ່ານາແລ້ງ - ໝອງຄາຍ (ປະເທດໄທ),
ຢູ່ເມືອງ ຫາດຊາຍຟອງ, ນະຄອນຫລວງວຽງຈັນ





ດ່ານກວດຄົນ ເຂົ້າເມືອງ ແລະ ຂົວມິດຕະພາບ ລາວ - ໄທ, ເຊື່ອມຕໍ່ລະຫວ່າງ
ນະຄອນຫລວງວຽງຈັນ - ແຂວງ ໝອງຄາຍ (ປະເທດໄທ)

3. ໄດ້ປະຕິບັດແຜນນະໂຍບາຍ ພັດທະນາຊັບພະຍາກອນມະນຸດ, ຮັກສາມໍລະດົກວັດທະນະທຳ ແລະ ຍົກລະດັບຄວາມສີວິໄລ ທາງດ້ານຈິດໃຈ ຂອງຊາວນະຄອນຫລວງ ໃຫ້ດີຂຶ້ນຕື່ມກ້າວໜຶ່ງ.

ໃນດ້ານການສຶກສາ, ມາເຖິງປີ 2005 ມີໂຮງຮຽນຂອງລັດ 539 ແຫ່ງ, ທຽບ ໃສ່ປີ 2001 ເພີ່ມຂຶ້ນ 6 ແຫ່ງ; ໂຮງຮຽນເອກະຊົນ ມີ 181 ແຫ່ງເພີ່ມຂຶ້ນ 55 ແຫ່ງ. ນອກນີ້ຍັງໄດ້ຍາດແຍ່ງເອົາການຊ່ວຍເຫລືອ ແລະ ການຮ່ວມມືກັບ ນະຄອນຫລວງຮ່າໂນ້ຍ, ນະຄອນໂຮ່ຈິ້ມິນ ສສ ຫວຽດນາມ, ສ້າງໂຮງຮຽນມັດທະຍົມ ໄດ້ 2 ແຫ່ງ ແລະ ໂຮງຮຽນວິຊາຊີບ 1 ແຫ່ງ; ຮັບ ແລະ ນຳໃຊ້ການຊ່ວຍເຫລືອຂອງລັດຖະບານ ຍີ່ປຸ່ນ ໃນການກໍ່ສ້າງໂຮງຮຽນຊັ້ນຕ່າງໆ ໄດ້ 90 ແຫ່ງ.



ການຮຽນ-ການສອນຂອງໂຮງຮຽນແຫ່ງໜຶ່ງ ໃນນະຄອນຫລວງວຽງຈັນ

ການເຄື່ອນໄຫວກິລາມວນຊົນປະເພດຕ່າງໆ ເພື່ອສຸຂະພາບ, ຄວາມສາມັກຄີ ແລະ ມິດຕະພາບໄດ້ຂະຫຍາຍຢ່າງກວ້າງຂວາງ; ຈັດຕັ້ງແຂ່ງຂັນຢູ່ພາຍໃນ ແລະ ເຂົ້າຮ່ວມການແຂ່ງຂັນບາງປະເພດກິລາຢູ່ຕ່າງປະເທດ. ສາມາດແຂ່ງຂັນ ແລະ ເປັນເຈົ້າຫລຽນຄຳ ໃນງານມະຫາກຳກິລາ ແຫ່ງຊາດ ຄັ້ງທີ VI ແລະ ຄອງຊະນະເລີດ ໃນການເຂົ້າຮ່ວມແຂ່ງຂັນເຕະບານ ລຸ້ນອາຍຸ 14 ປີ ຂອງປະເທດອາຊຽນ



ໂຮງຮຽນ ມັດທະຍົມສົມບູນ ມິດຕະພາບລາວ - ຫວຽດນາມ,

ດ້ານສຸຂະສຶກສາ ໃຫ້ປະຊາຊົນບັນດາເຜົ່າ ກໍ່ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ເຮັດໃຫ້ ປະຊາຊົນ ຮູ້ຈັກວິທີສົ່ງເສີມ, ກັນພະຍາດ, ການປິ່ນປົວ ແລະ ແກ້ໄຂພະຍາດທີ່ເກີດຂຶ້ນຕາມລະ ດູການ ເຊັ່ນ: ໄຂ້ເລືອດອອກ, ຖອກທ້ອງ. ອັດຕາສ່ວນເສຍຊີວິດຂອງ ປະຊາຊົນ ຫລຸດລົງ ຢ່າງ ຈະແຈ້ງ, ອາຍຸຍືນສະເລ່ຍ 62 ປີ, ພົ້ນເດັ່ນ ແມ່ນສາມາດປະກາດ ລົບລ້າງພະຍາດເປ້ຍລ່ອຍ ໂປລິໂອ ໃນປີ 2000.

ວຽກງານຖະແຫລງຂ່າວ ວັດທະນະທຳສື່ມວນຊົນ ກໍ່ໄດ້ເຄື່ອນໄຫວຢ່າງເປັນລະບົບ ສາ ມາດປົກປັກຮັກສາ ແລະ ເສີມຂະຫຍາຍໄດ້ມູນເຊື້ອ ວັດທະນະທຳ ອັນດີງາມຂອງຊາດ, ຂອງ ທ້ອງຖິ່ນ, ສ້າງຄອບຄົວວັດທະນະທຳໃໝ່ ໄດ້ເຖິງ 5.000 ຄອບຄົວ. ນອກນີ້, ຍັງໄດ້ເອົາໃຈໃສ່ ບູລະນະ ເດີ່ນພະທາດຫລວງ, ກໍ່ສ້າງສວນປະຕູໄຊ, ສວນອະນຸສອນສະຖານ ເຈົ້າ ຟ້າງຸ່ມ, ສວນ 23 ສິງຫາ ແລະ ແຫ່ງອື່ນໆ.



ຜະລິດຕະພັນສິ່ງພິມ

ໄດ້ເອົາໃຈໃສ່ພັດທະນາ ແຫລ່ງທ່ອງທ່ຽວປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ, ປັບປຸງບູລະນະປູສະນີຍະສະຖານ, ວັດວາອາຮາມ, ປັບປຸງຍົກລະດັບການບໍລິການ, ຄຸ້ມຄອງບັນດາ ໂຮງແຮມ ເຮືອນພັກ, ຮ້ານບັນເທີງ ແລະ ອື່ນໆ. ປີ 2000 - 2005 ມີນັກ ທ່ອງທ່ຽວ ເຂົ້າມາທ່ອງທ່ຽວ ນະຄອນຫລວງວຽງຈັນ ສະເລ່ຍປີລະ 500.000ເທື່ອຄົນ, ທຽບໃສ່ ປີ 1996 ເພີ່ມຂຶ້ນ 2 ເທົ່າ.



ຕົວເລກນັກເດີນທາງເຂົ້າ-ອອກ ຜ່ານດ່ານ ສະໜາມບິນສາກົນວັດໄຕ ແລະ ຂົວມິດຕະພາບ ລາວ-ໄທ ໃນປີ 2007



ວັດສີສະເກດ



ຫໍພະແກ້ວ

4. ໄດ້ເອົາໃຈໃສ່ເຮັດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກຢ່າງຕັ້ງໜ້າ, ຊຶ່ງສາມາດຮັບປະກັນສະຖຽນລະພາບ ທາງດ້ານການເມືອງ ເຮັດໃຫ້ ນະຄອນຫລວງ ມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມໂດຍພື້ນຖານ.

5. ໄດ້ເສີມຂະຫຍາຍສາຍພົວພັນ ມິດຕະພາບ ແລະ ການຮ່ວມມື ກັບບັນດານະຄອນ, ອົງການຈັດຕັ້ງສາກົນຢ່າງກວ້າງຂວາງ. ເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສມັກຄີ ແບບພິເສດອັນເປັນມູນເຊື້ອ, ການຮ່ວມມືຮອບດ້ານກັບ ນະຄອນຫລວງຮ່າໂນ້ຍ, ນະຄອນໂຮ່ຈິ ມິນ ແລະ ແຂວງອື່ນໆ ຂອງ ສສ ຫວຽດນາມ. ຂະຫຍາຍສາຍພົວພັນ ມິດຕະພາບ ການຮ່ວມມື ແລກປ່ຽນບົດຮຽນ ກັບບັນດາ ນະຄອນຫລວງ ຂອງ ສປ ຈີນ, ບັນດານະຄອນຫລວງ ປະເທດອາ ຊຽນ ແລະ ປະເທດຕ່າງໆ ໃນໂລກ.

6. ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ໄດ້ຮັບການບູລະນະຢ່າງຕໍ່ເນື່ອງ, ສິດ ເປັນເຈົ້າ ແລະ ຄວາມສາມັກຄີ ເປັນປຶກແຜ່ນຂອງປະຊາຊົນ ໄດ້ຮັບການເສີມຂະຫຍາຍຢ່າງ ແຂງແຮງຢູ່ໃນທຸກຂົງເຂດ.

ຄະນະພັກທຸກຂັ້ນ ໄດ້ຖືເອົາການສຶກສາອົບຮົມ ການເມືອງ - ແນວຄິດ ຕິດພັນກັບການກໍ່ ສ້າງຮາກຖານການເມືອງເປັນກົກ. ໄດ້ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ບັນດາມະຕິຕ່າງໆ ຂອງກອງປະຊຸມໃຫຍ່ຂອງພັກ, ຂອງອົງຄະນະພັກ ນະຄອນຫລວງ ລົງເຖິງທ້ອງຖິ່ນຮາກຖານ; ຍົກລະດັບຄວາມຮູ້ທິດສະດີ ການເມືອງ ແລະ ການປົກຄອງ, ເຊີດຊູນ້ຳໃຈຮັກຊາດຮັກລະບອບ ໃໝ່, ເສີມຂະຫຍາຍຈິດໃຈເປັນເຈົ້າຕົນເອງ ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນ ເອງ, ຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ທີ່ມີຫລັກການຂອງພັກ ຕາມຈຸດໝາຍສັງຄົມ ນິຍົມ ຕ້ານທຸກກົນອຸບາຍຫັນປ່ຽນໂດຍສັນຕິ, ແນວຄິດຫລາຍພັກ ຫລາຍເຄົ້າຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນຢ່າງທົ່ວເຖິງ.

ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບອບ, ລະບຽບການ ແລະ ກົດໝາຍພວມມີ ທ່ວງທ່າດີຂຶ້ນ, ອຳນາດການປົກຄອງ ປະຊາທິປະໄຕ ປະຊາຊົນ ໄດ້ຮັບການ ບູລະນະ ແລະ ໄດ້ ກາຍເປັນເຄື່ອງມືຮັບໃຊ້ຂອງປະຊາຊົນ ເພື່ອປະຊາຊົນ ຢ່າງຈະແຈ້ງກວ່າເກົ່າ.

ເສີມຂະຫຍາຍບົດບາດ ສິດເປັນເຈົ້າຂອງປະຊາຊົນ, ອົງການ ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ກາຍເປັນກຳລັງແຮງ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ນະຄອນຫລວງວຽງຈັນ.

ກ່ຽວກັບອົງການຈັດຕັ້ງມະຫາຊົນ ນະຄອນຫລວງ ຍ້ອນໄດ້ຮັບການເອົາໃຈໃສ່ ຂອງຄະນະພັກ, ອຳນາດການປົກຄອງ, ການຈັດຕັ້ງມະຫາຊົນແຕ່ລະຂັ້ນ ລ້ວນແຕ່ໄດ້ຍົກສູງພາລະບົດບາດຂອງຕົນ ໂດຍການເຂົ້າຮ່ວມຂະບວນການອອກແຮງງານ, ເພີ່ມພູນຜະລິດຜົນຢ່າງເປັນຂະບວນຟົດຟື້ນ, ວັນທີ 26/6/2006 ຄະນະຊາວໜຸ່ມ ນະຄອນຫລວງ ຮ່ວມກັບສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ໄດ້ຈັດງານໂຮມຊຸມນຸມ ຊົມເຊີຍຜົນສຳເລັດ ກອງປະຊຸມໃຫຍ່ ຜູ້ແທນຊາວໜຸ່ມ ທົ່ວປະເທດ ຄັ້ງທີ V ທີ່ໄດ້ສຳເລັດລົງໃນ ວັນທີ 25/6 ຜ່ານມາ, ໂດຍການເຂົ້າຮ່ວມຂອງທ່ານ ສີສະຫວາດ ແກ້ວບຸນພັນ ກົມການເມືອງສູນກາງພັກ ປະທານແນວລາວສ້າງຊາດ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ມີອົງການຈັດຕັ້ງມະຫາຊົນ, ຊາວໜຸ່ມ ນະຄອນຫລວງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນສົກປີ 2008 - 2009 ນີ້, ນະຄອນຫລວງວຽງຈັນ ໄດ້ຮັບຜົນກະທົບ ຈາກໄພນ້ຳຖ້ວມ ເຮັດໃຫ້ ເນື້ອທີ່ການຜະລິດຂອງປະຊາຊົນ ເສຍຫາຍ ເຖິງ 14,846 ເຮັກຕາ, ການຜະລິດເຂົ້າຂອງປະຊາຊົນໄດ້ຫລຸດລົງ. ດັ່ງນັ້ນ ໃນຕໍ່ໜ້ານີ້, ຄະນະພັກ ອຳນາດການປົກຄອງ ນະຄອນຫຼວງວຽງຈັນ ໄດ້ຕັ້ງເປົ້າໝາຍໃນການຜະລິດເຂົ້າ, ພືດກະສິກຳໃຫ້ໄດ້ຫລາຍ, ໂດຍສູ້ຊົນຜະລິດເຂົ້າໃຫ້ໄດ້ 331,422 ໂຕນ, ຊຶ່ງຫລາຍກວ່າຄາດໝາຍໃນຊຸມ ປີຜ່ານມາ 50 000 ໂຕນ. ພ້ອມດຽວກັນນີ້, ນະຄອນຫລວງ ຍັງຈະໄດ້ສຸມໃສ່ແກ້ໄຂ ຈຳນວນ 394 ຄອບຄົວ ທີ່ຍັງທຸກຍາກ ສືບຕໍ່ປັບປຸງການສຶກສາ, ແກ້ໄຂຫ້ອງຮຽນບໍ່ພຽງພໍ ແລະ ໃຫ້ເດັກນ້ອຍ ໃນເກນອາຍຸ 6 -10 ປີ ໄດ້ເຂົ້າໂຮງຮຽນ. ບັນຫາການແກ້ໄຂຄວາມທຸກຍາກຂອງປະຊາຊົນນັ້ນ, ພາຍໃຕ້ການຊີ້ນຳຂອງຄະນະພັກນະຄອນຫລວງ ແມ່ນສຸມໃສ່ການຈັດສັນເນື້ອທີ່ ທຳການຜະລິດ, ຈັດຕັ້ງກຸ່ມການຜະລິດຕາມຂະແໜງວິຊາອາຊີບ, ພ້ອມທັງສ້າງກອງທຶນພັດທະນາ ໝູ່ບ້ານ. ໃນປີ 2009 ນີ້, ໄດ້ສືບຕໍ່ການມອບດິນ - ມອບປ່າ ໃຫ້ບັນດາບ້ານ ທີ່ມີການຖາງປ່າເຮັດໄຮ່ປູກເຂົ້າ ໂດຍສະເພາະ ຢູ່ເຂດ ບ້ານ ຂໍ້, ເມືອງ ສັງທອງ.





ທ່ານ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີ ແລະ ທ່ານ ສົມບັດ ເຢຍລີເຮີ ເຈົ້າຄອງ ນະຄອນຫຼວງວຽງຈັນ
ລົງຊີ້ນຳປ້ອງກັນນ້ຳຖ້ວມ



ປະຊາຊົນຊາວ ນະຄອນຫລວງວຽງຈັນ ສາມັກຄີກັນ ສ້າງຄູກັນນ້ຳ ເພື່ອຕ້ານໄພນ້ຳຖ້ວມ

ຜົນງານ ແລະ ໄຊຊະນະ ດັ່ງກ່າວນັ້ນ, ກ່ອນອື່ນໝົດ ແມ່ນຍ້ອນພວກເຮົາໄດ້ເຊື່ອມຊຶມ ກຳແໜ້ນແນວທາງປ່ຽນແປງໃໝ່ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ນະຄອນຫລວງວຽງຈັນ; ອົງຄະນະພັກ ໄດ້ເຊີດຊູບົດບາດ ແລະ ຄວາມຮັບຜິດຊອບ ໃນການຈັດຕັ້ງຜັນຂະຫຍາຍ ເປັນແຜນນະໂຍບາຍ ອັນລະອຽດ, ສອດຄ່ອງກັບສະພາວະຄວາມເປັນຈິງ ແລະ ຄວາມມຸ້ງມາດປາດຖະໜາຂອງປະຊາຊົນ, ແມ່ນໝາກຜົນລວມຍອດ ແຫ່ງຄວາມສາມັກຄີປອງດອງ ທີ່ເປັນປຶກແຜ່ນ ແລະ ຄວາມຕັດສິນໃຈບຸກບືນຜ່ານຜ່າ ຂອງທົ່ວອົງຄະນະພັກ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ ໄດ້ເຊີດຊູນ້ຳໃຈຮັກຊາດ, ຮັກລະບອບ ປະຊາທິປະ ໄຕປະຊາຊົນ, ເສີມຂະຫຍາຍສິດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ທັງຮູ້ປະສານສົມທົບ ຢ່າງກົມກຽວ ລະຫວ່າງການຂຸດຄົ້ນກຳລັງແຮງສັງລວມພາຍໃນ ກັບການສະໜັບສະໜູນຊ່ວຍເຫລືອ ຈາກເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຢ່າງມີປະສິດທິຜົນ.

ຫລັງຈາກຕີລາຄາໝາກຜົນ ຂອງການຈັດຕັ້ງ ປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ III ແລ້ວ, ກອງປະຊຸມໃຫຍ່ອົງ ຄະນະພັກ ນະຄອນຫລວງວຽງຈັນ ຄັ້ງທີ IV ຍັງໄດ້ກຳນົດຍຸດທະສາດ ການພັດທະນາ ນະຄອນຫລວງວຽງຈັນ ແລະ ທິດທາງໜ້າທີ່ສຳຄັນໃນຕໍ່ໜ້າອອກ ຊຶ່ງໄດ້ກຳນົດຄາດໝາຍສູ້ຊົນໃນແຕ່ລະໄລຍະອອກຄື ດັ່ງນີ້:

*** ຄາດໝາຍ ສູ້ຊົນ ໄລຍະຮອດປີ 2020.**

1. ສ້າງນະຄອນຫລວງວຽງຈັນ ໃຫ້ເປັນໃຈກາງທາງດ້ານ ການເມືອງ, ເສດຖະກິດ ແລະ ວັດທະນະທຳຂອງປະເທດ, ເປັນເມືອງທຸລະກິດ ແລະ ບໍລິການ ເປັນຫົວໜ່ວຍຍຸດທະສາດໜຶ່ງ ທີ່ເຂັ້ມແຂງຮອບດ້ານ, ຍຸດຕິທຳ, ສີວິໄລ ແລະ ທັນສະໄໝ ຢ່າງບໍ່ຢຸດຢັ້ງ.

2. ເສດຖະກິດຂະຫຍາຍຕົວ ດ້ວຍຈັງຫວະໄວ ແລະ ມີຄວາມໝັ້ນທ່ຽງ ບໍ່ໃຫ້ຕ່ຳກວ່າ 10%, ຍອດຜະລິດຕະພັນພາຍໃນ GDP ໃຫ້ບັນລຸບໍ່ຫລຸດ 20.000 ຕື້ກີບ ຫລື ເພີ່ມຂຶ້ນ 2,5 ເທື່ອທຽບໃສ່ປີ 2005 ສະເລ່ຍລາຍຮັບຕໍ່ຄົນຕໍ່ປີໄດ້ 2.200 - 2.300ໂດລາ. ໂດຍທົ່ວໄປພົນລະເມືອງໄດ້ນຸ່ງງາມ, ກິນແຊບ ແລະ ໄດ້ຮັບການປະກັນດ້ານສະຫວັດດີການໃນລະດັບທີ່ແນ່ນອນ.



ວັນທີ 14 ກຸມພາ 2009 ສປປ ລາວ ໄດ້ຮັບຄ້ອງສັນຕິພາບໂລກ ແລະ ໄດ້ແຂວນໄວ້ທີ່ສວນປະຕູໄຊ ໃຈກາງນະຄອນຫຼວງວຽງຈັນ

3. ສ້າງໂຄງປະກອບເສດຖະກິດຂອງນະຄອນຫລວງຕາມທິດເປັນເຈົ້າຕົນເອງ, ມີຄວາມກົມກຽວລະຫວ່າງກະສິກຳ - ປ່າໄມ້, ອຸດສະຫະກຳ - ຫັດຖະກຳ, ປຸງແຕ່ງ ແລະ ການບໍລິການ ຕາມທິດທັນເປັນ ອຸດສະຫະກຳ - ທັນສະໄໝ, ໃນນັ້ນພາກສ່ວນເສດຖະກິດຂອງລັດ, ເສດຖະກິດຮ່ວມມືຂອງປະຊາຊົນ ກາຍເປັນໜ່ໍແໜງ, ເປັນຕົວແທນຂອງກຳລັງການຜະລິດ ແລະ ແບບວິທີການຜະລິດຂອງສັງຄົມນິຍົມ ແລະ ກ້າວຂຶ້ນເປັນເຈົ້າພາທາງ.

4. ປະຊາຊົນ ບັນດາເຜົ່າ ມີນ້ຳໃຈຮັກຊາດຢ່າງເລິກຊຶ້ງ, ສະຕິເປັນເຈົ້າຕົນເອງ, ສ້າງ ຄວາມເຂັ້ມແຂງດ້ວຍຕົນເອງ, ມີຄວາມສາມັກຄີປອງດອງ, ມີລະດັບການສຶກສາທົ່ວໄປຈົບມັດ ທະຍົມຕອນປາຍ ໂດຍພື້ນຖານ; ໄດ້ຮັບການບໍລິການ ດ້ານສາທາລະນະສຸກ ຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ເພີ່ມອາຍຸຍືນຂອງປະຊາຊົນ ສະເລ່ຍໃນລະດັບ 75 ປີ, ວັດທະນະທຳ, ຮີດຄອງ ປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນໄດ້ຮັບການປົກປັກຮັກສາ ແລະ ເສີມຂະ ຫຍາຍເປັນ ຢ່າງດີ, ສັງຄົມມີຄວາມຍຸດຕິທຳສີວິໄລ.

5.ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ແຕ່ລະຂັ້ນມີຄວາມໝັ້ນຄົງໜັກແໜ້ນ, ເຂັ້ມແຂງ, ອຳນາດລັດຂອງປະຊາຊົນໂດຍປະຊາຊົນ ແລະ ເພື່ອປະຊາຊົນ ໄດ້ສະແດງອອກ ແຈ້ງໃນພາກຕົວຈິງ; ສິດຜົນປະໂຫຍດ ແລະ ພັນທະຂອງພົນລະເມືອງ ໄດ້ຮັບການ ຈັດຕັ້ງປະຕິ ບັດ, ປົກປ້ອງດ້ວຍກົດໝາຍ, ມີຄວາມສັກສິດຫລາຍຂຶ້ນ.

6. ສ້າງສາຍພົວພັນມິດຕະພາບ, ການຮ່ວມມືກັບບັນດາ ນະຄອນຫລວງ ປະເທດຕ່າງໆ ແລະ ອົງການຈັດຕັ້ງສາກົນຂະຫຍາຍຕົວຢ່າງກວ້າງຂວາງ ແລະ ມີຄວາມສາມາດເປັນເຈົ້າການ ສູງຂຶ້ນກວ່າເກົ່າ.



ນາງສາວ ອາພອນລາວ ປີ 2009
ຢູ່ນະຄອນຫລວງວຽງຈັນ



ທ່ານ ບຸນຍັງ ວໍລະຈິດ ໄຫວ້ ພິມວິຫານ

*** ຄາດໝາຍສູ້ຊົນຮອດປີ 2015.**

1. ສ້າງ ນະຄອນຫລວງວຽງຈັນ ຫລຸດພົ້ນອອກຈາກ ສະພາວະດ້ອຍພັດທະນາ ມີປັດໄຈພື້ນຖານເພື່ອຫັນເປັນອຸດສະຫະກຳ ແລະ ທັນສະໄໝໃນຂະແໜງການຈຳນວນໜຶ່ງ.

2. ເສດຖະກິດຂະຫຍາຍຕົວ ສົມຄູ່ກັບຄວາມມີສະຖຽນລະພາບ, ສະເລ່ຍແຕ່ລະປີເພີ່ມຂຶ້ນບໍ່ຫລຸດ 9,5%, ລວມຍອດຜະລິດຕະພັນພາຍໃນບໍ່ໃຫ້ຫລຸດ 17.000 ຕື້ກີບ, ສະເລ່ຍລາຍໄດ້ຕໍ່ຫົວຄົນຕໍ່ປີ 1.700 - 1.800 ໂດລາ.

3. ສ້າງ ນະຄອນຫລວງວຽງຈັນ ໃຫ້ເປັນຕົວເມືອງສີຂຽວ, ໜ້າຢູ່ອາໄສ ແລະ ປອດຢາເສບຕິດ, ຊານເມືອງ, ເມືອງອ້ອມຂ້າງໄດ້ຮັບການພັດທະນາ.

4. ພົນລະເມືອງ ມີວຽກເຮັດງານທຳຢ່າງທົ່ວເຖິງ,ໄດ້ຮັບການປະກັນສັງຄົມ ແລະ ທຸກຄົນຈົບການສຶກສາຊັ້ນມັດທະຍົມຕອນຕົ້ນ. ແຕ່ລະຄອບຄົວມີທີ່ຢູ່ອາໄສໝັ້ນຄົງ, ພົນລະເມືອງແຕ່ລະຄົນໄດ້ນຸ່ງອຸ່ນກິນອີ່ມ.

*** ຄາດໝາຍສູ້ຊົນແຕ່ນີ້ຮອດປີ 2010.**


1. ເສີມຂະຫຍາຍກຳລັງແຮງສັງລວມ ແລະ ສ້າງທຸກເງື່ອນໄຂເອື້ອອຳນວຍ ຮັບປະກັນ ເຮັດໃຫ້ເສດຖະກິດ ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນລະດັບ 9 % ຕໍ່ປີ, ລວມຍອດຜະລິດຕະພັນ ພາຍໃນສັງຄົມບັນລຸໄດ້ 11.130 ຕື້ກີບ, ສະເລ່ຍລາຍໄດ້ ຕໍ່ຫົວຄົນ ບັນລຸໄດ້ ປະມານ 1.200 - 1.300 ໂດລາຕໍ່ຄົນຕໍ່ປີ. ໃນນັ້ນຂົງເຂດກະສິກຳ - ປ່າໄມ້ ເພີ່ມຂຶ້ນ 7,79%, ກວມ 17%; ຂົງເຂດອຸດສະຫະກຳ - ຫັດຖະກຳ ເພີ່ມຂຶ້ນ 8,16% ກວມ 55,2%; ຂົງເຂດ ບໍລິການ - ການຄ້າ ເພີ່ມຂຶ້ນ11,28%, ກວມ 27,8%; ປັບປຸງ ແລະ ຂະຫຍາຍ ໂຄງປະກອບເສດຖະກິດ ໃຫ້ມີການ ຫັນປ່ຽນຕາມທິດທີ່ຕັ້ງໜ້າ ແລະ ມີບາງດ້ານທັນສະໄໝ. ຊຸກຍູ້ການຜະລິດສິນຄ້າໃຫ້ຂະຫຍາຍ ຕົວຢ່າງແຂງແຮງ, ແກ້ໄຂຄວາມທຸກຍາກຂັ້ນບ້ານ ໃຫ້ໄດ້ໂດຍພື້ນຖານ ແລະ ຍົກລະດັບຊີວິດ ວັດທະນະທຳຂອງປະຊາຊົນ ໃຫ້ດີຂຶ້ນກວ່າເກົ່າ, ສ້າງພື້ນຖານວັດຖຸ - ເຕັກນິກ ແລະ ບຸກຄະລາ ກອນ ເພື່ອຮອງຮັບການຫັນເປັນອຸດສະຫະກຳ ແລະ ທັນສະໄໝ ໃນໄລຍະຕໍ່ໄປ.

2. ຮັບປະກັນເຮັດໃຫ້ນະຄອນຫລວງ ມີສະຖຽນລະພາບທາງດ້ານການເມືອງ ມີຄວາມ ສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມຢ່າງໜັກແໜ້ນ, ແກ້ໄຂ ປະກົດການຫຍໍ້ທໍ້ໃນສັງຄົມ ໃຫ້ຫລຸດລົງຢ່າງຈະແຈ້ງ.

3. ຍູ້ແຮງການພັດທະນາຕົວເມືອງ, ຊານເມືອງ ແລະ ເມືອງອ້ອມຂ້າງ, ຫັນຕົວເມືອງວຽງ ຈັນ ໃຫ້ສາມາດຮອງຮັບການເພີ່ມຂຶ້ນຂອງ ພົນລະເມືອງ ແລະ ມີຄວາມສະອາດ ສວຍງາມ.

4. ຮັບປະກັນເຮັດໃຫ້ຄົນ ນະຄອນຫລວງ ໄດ້ຮັບການອົບຮົມມູນເຊື້ອ, ແນວທາງນະໂຍ ບາຍຂອງພັກຢ່າງກວ້າງຂວາງ, ທຸກຄົນມີສະຕິເຄົາລົບຕໍ່ລະບຽບກົດໝາຍ, ມີຄວາມສີວິໄລທາງ ດ້ານຈິດໃຈ, ມີລະດັບການສຶກສາຈົບຊັ້ນປະຖົມ, ມີວຽກເຮັດງານທຳ, ມີສຸຂະພາບພາລະນາ ໄມ, ອາຍຸຍືນສະເລ່ຍໃນລະດັບ 68 ປີ, ສ້າງບຸກຄະລາກອນຕອບສະໜອງຄວາມຮຽກຮ້ອງຕ້ອງ ການທີ່ຈຳເປັນ ໃນການພັດທະນາປະເທດຊາດ, ຂະຫຍາຍບ້ານ ແລະ ຄອບຄົວວັດທະນະທຳ ໃຫ້ຫລາຍກວ່າເກົ່າ.

5. ເຊີດຊູບົດບາດ, ຄວາມສາມາດ ແລະ ແບບວິທີນຳພາຂອງພັກທຸກຂັ້ນ, ຍົກສູງຄວາມ ເປັນແບບຢ່າງ, ລັກສະນະນຳໜ້າຂອງສະມາຊິກພັກ ໃນທຸກຂົງເຂດວຽກງານ; ປັບປຸງແບບແຜນ ວິທີນຳພາຂອງພັກ ຢູ່ແຕ່ລະຂະແໜງການ ແລະ ຮາກຖານໃຫ້ມີປະສິດທິຜົນ, ສູ້ຊົນສ້າງໜ່ວຍ ພັກແຂງ - ຮູ້ນຳພາຮອບດ້ານ ໃຫ້ໄດ້ 50%, ປັບປຸງກົງຈັກການຈັດຕັ້ງ, ລະບອບແບບແຜນວິທີ ເຮັດວຽກຂອງອົງການ ບໍລິຫານລັດ ຕາມທິດກະທັດຮັດ, ວ່ອງໄວ, ທັນສະໄໝ, ມີຄວາມສັກສິດ, ຜ່ານປະຕູດຽວ ແລະ ທັນເຂົ້າສູ່ການຄຸ້ມຄອງ ບໍລິການ ຮັບໃຊ້ປະຊາຊົນ ຢ່າງແທ້ຈິງ.



ທ່ານ ທອງສິງ ທຳມະວົງ
ກຳມະການ ກົມການເມືອງ
ສູນກາງພັກ, ເຈົ້າຄອງ
ນະຄອນຫລວງວຽງຈັນ
ປີ 2001 - 2006

*** ໜ້າທີ່ການເມືອງສຳຄັນ ຂອງອົງຄະນະພັກ ນະຄອນຫລວງ ສະໄໝ ທີ IV (ປີ 2005 - 2010)**

1. ກ່ອນອື່ນໝົດ ຕ້ອງຈັດຕັ້ງນຳພາ ການປະຕິບັດ ແຜນພັດທະ ນາ ເສດຖະກິດ - ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ VI ຂອງນະຄອນຫລວງ ໃຫ້ປະກົດຜົນເປັນຈິງ.

2. ຈັດຕັ້ງນຳພາ ໂຄງການຜະລິດສິນຄ້າ ປາຍແຫລມ ໃນຂະ ແໜງ ກະສິກຳ, ອຸດສະຫະກຳ - ຫັດຖະກຳ (12 ໂຄງການໃຫຍ່ ແລະ 46 ໂຄງການຍ່ອຍ) ໃຫ້ປະກົດຜົນເປັນຈິງ.

3. ສູ້ຊົນແກ້ໄຂຂໍ້ຫຍຸ້ງຍາກ ດ້ານການເງິນ ແລະ ງົບປະມານ ຂອງນະຄອນຫລວງ ໃຫ້ເກີດມີຄວາມຄ່ອງຕົວດີຂຶ້ນ.

4. ຖືເປັນສຳຄັນການຂະຫຍາຍກຳລັງການຜະລິດໃຫ້ສອດຄ່ອງ ກັບການພົວພັນການຜະລິດ, ປັບປຸງຫົວໜ່ວຍວິສາຫະກິດ, ສົ່ງເສີມເສດຖະກິດຮ່ວມມືຂອງປະ ຊາຊົນ.

5. ເອົາໃຈໃສ່ປະຕິບັດນະໂຍບາຍ ຄຸ້ມຄອງເສດຖະກິດ ຕາມກົນໄກຕະຫລາດ.

6. ຕັ້ງໜ້າປັບປຸງ ແລະ ຂະຫຍາຍໂຄງປະກອບເສດຖະກິດກະສິກຳ, ອຸດສະຫະກຳ ແລະ ການບໍລິການ.

7. ຫັນຕົວເມືອງວຽງຈັນ ໃຫ້ຫລຸດພົ້ນຈາກສະພາວະດ້ອຍພັດທະນາ, ກາຍເປັນຕົວເມືອງ ພັດທະນາໃນລະດັບພໍປານກາງ, ຫັນໝູ່ບ້ານໃນເຂດຊານເມືອງໃຫ້ເປັນຕົວເມືອງນ້ອຍ, ຖືວຽກ ດ່ຽງກ່າວ ເປັນພາລະກິດໜຶ່ງທີ່ສຳຄັນຂອງຊາວ ນະຄອນຫລວງວຽງຈັນ.

8. ຍູ້ແຮງການພັດທະນາ ຊັບພະຍາກອນມະນຸດ, ແກ້ໄຂສະຫວັດດີການສັງຄົມ, ປົກປັກ ຮັກສາ ແລະ ຂະຫຍາຍ ວັດທະນະທຳ ອັນດີງາມຂອງຊາດ.

9. ສ້າງ ນະຄອນຫລວງວຽງຈັນ ໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະ ຫງົບປອດໄພແລະມີຄວາມເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ.

10. ໃຫ້ມີປະສິດທິຜົນ ປະຕິບັດນະໂຍບາຍຕ່າງປະເທດຂອງພັກ, ສືບຕໍ່ເປີດກວ້າງການ ພົວພັນຮ່ວມມືເສດຖະກິດ ກັບບັນດາ ນະຄອນຫລວງ ຂອງປະເທດຕ່າງໆ.

11. ເພີ່ມທະວີຄວາມສັກສິດ ແລະ ປະສິດທິຜົນຂອງການບໍລິຫານລັດ, ປັບປຸງກໍ່ສ້າງອຳ ນາດການປົກຄອງຂອງນະຄອນຫລວງ ໃຫ້ກາຍເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອ ປະຊາຊົນຢ່າງແທ້ຈິງ. ເພີ່ມທະວີບົດບາດການນຳພາຂອງພັກ, ເຮັດໃຫ້ອົງຄະນະພັກ ນະຄອນ



ທ່ານ ດຣ ສົມລະວິງ ຄຸດໄພທູນ ກຳມະການສູນກາງພັກ ລັດຖະມົນຕີ ວ່າການແຜນການ ແລະ ການລົງທຶນ.

ຮອງເລຂາພັກ, ເຈົ້າຄອງ ນະຄອນຫລວງວຽງຈັນ. ປີ 2006 - 2009.

ຫລວງວຽງຈັນ ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ທຽມທັນກັບ ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ ໃນໄລຍະໃໝ່ ຄື:

1. ຍົກສູງກຳລັງແຮງ ແລະ ຄວາມສາມາດຈັດຕັ້ງນຳພາຂອງ ຣາກຖານພັກ.
2. ຍົກສູງຄຸນທາດການເມືອງ, ລະດັບຄວາມຮູ້ທິດສະດີ ແລະ ພຶດຕິກຳໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານ ຮັບປະກັນໃຫ້ວຽກງານແນວຄິດສອດຫ້ອຍໃນທຸກຂົງເຂດວຽກງານ.
3. ປັບປຸງ ແລະ ກໍ່ສ້າງພັກ ດ້ານການຈັດຕັ້ງໃຫ້ເຂັ້ມແຂງ, ໂປ່ງໃສ ແລະ ມີແບບແຜນວິທີນຳພາທີ່ກ້າວໜ້າ.
4. ຕັ້ງໜ້າກໍ່ສ້າງພະນັກງານ, ເອົາໃຈໃສ່ສ້າງພະນັກງານໃຫ້ໄດ້ຕາມມາດຖານ ເພື່ອຮັບປະກັນການປະຕິບັດໜ້າທີ່ການເມືອງ ໃນໄລຍະໃໝ່.ຍົກລະດັບຄວາມຮູ້ຄວາມສາມາດ, ຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດຂອງພະນັກງານແຕ່ລະຂັ້ນ, ເປັນຕົ້ນ ແມ່ນ ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ພະນັກງານ ທີ່ເປັນເສນາທິການຂອງການນຳ.
5. ເພີ່ມທະວີວຽກງານກວດກາຄຸ້ມຄອງ ແລະ ປ້ອງກັນພັກ. ດຳເນີນການກວດກາ ໃຫ້ເປັນປົກກະຕິ, ສົມທົບແໜ້ນການກວດກາພັກ ກັບການດຳເນີນຊີວິດການເມືອງ ພາຍໃນພັກ ກວດກາການປະຕິບັດຫຼັກການການຈັດຕັ້ງ ແລະ ກົດລະບຽບຂອງພັກ ເພື່ອສືບຕໍ່ຊີ້ນຳ - ນຳພາ ຈັດຕັ້ງປະຕິບັດບັນດາທິດທາງໜ້າທີ່ ກໍ່ຄືຄາດໝາຍສູ້ຊົນ ທີ່ມະຕິກອງປະຊຸມໃຫຍ່ ອົງຄະນະພັກ ຄັ້ງທີ IV ວາງອອກ. ກອງປະຊຸມ ໄດ້ເລືອກຕັ້ງເອົາ ຄະນະບໍລິຫານງານພັກ ແລະ ອຳນາດການປົກຄອງ ນະຄອນຫລວງວຽງຈັນ ປະກອບມີ:

1, ສະຫາຍ ທອງສິງ ທຳມະວິງ ກຳມະການກົມການເມືອງສູນກາງພັກ, ເປັນເລຂາຄະນະພັກ.

2. ສະຫາຍ ດຣ ສົມລະວິງ ຄຸດໄພທູນ ກຳມະການສູນກາງພັກ, ເປັນຮອງເລຂາພັກ, ທັງ ເປັນເຈົ້າຄອງ ນະຄອນຫລວງວຽງຈັນ.

3. ສະຫາຍ ສົມວັນດີ ນາຖາວິງ ເປັນກຳມະການ ປະຈຳພັກ.

4. ສະຫາຍ ບຸນຈັນ ສົນທະວິງ ເປັນກຳມະການ ປະຈຳພັກ.

5. ສະຫາຍ ພັເອກ ຄຳຫອມ ແສງບົວລົມ ເປັນກຳມະການ ປະຈຳພັກ.

6. ສະຫາຍ ພັນເອກ ສີທຸນ ສິດທິລືໄຊ ເປັນກຳມະການ ປະຈຳພັກ.

7. ສະຫາຍ ບຸນທ່ຽງ ຂຸນສີ ເປັນກຳມະການ ປະຈຳພັກ.
8. ສະຫາຍ ນາງ ທອງວັນຄຳ ສິດທິລາດ ເປັນກຳມະການ ປະຈຳພັກ.
9. ສະຫາຍ ແກ່ນຕາ ກອງບຸນມີ. ເປັນກຳມະການ ປະຈຳພັກ.
10. ສະຫາຍ ບຸນທອນ ໄຊສົງຄາມ ເປັນກຳມະການພັກ.
11. ສະຫາຍ ຈົ່ວາ ໄຊຕົງ ເປັນກຳມະການພັກ.
12. ສະຫາຍ ສາຍທອງ ແກ້ວດວງດີ ເປັນກຳມະການພັກ.
13. ສະຫາຍ ບຸນທອງ ພົມມະຈັນ ເປັນກຳມະການພັກ.
14. ສະຫາຍ ອຸ່ນເຮືອນ ໂພທິລາດ ເປັນກຳມະການພັກ.
15. ສະຫາຍ ທອງຄູນ ແສງດາລາ ເປັນກຳມະການພັກ.
16. ສະຫາຍ ບຸນປອນ ສີສຸລາດ ເປັນກຳມະການພັກ.
17. ສະຫາຍ ນາງ ອ່ອນຈັນ ພົມມະວົງ ເປັນກຳມະການພັກ.
18. ສະຫາຍ ນາງ ບົວລອນ ວົງດາລາແສນ ເປັນກຳມະການພັກ.
19. ສະຫາຍ ສູນທອນ ສີລາເພັດ ເປັນກຳມະການພັກ.
20. ສະຫາຍ ບຸນສີ ຫລ້າທອງສະຫວັນ ເປັນກຳມະການພັກ.
21. ສະຫາຍ ພອຍຄຳ ຮຸ່ງບຸນຍວງ ເປັນກຳມະການພັກ.
22. ສະຫາຍ ອະນຸພາບ ຕຸນາລົມ ເປັນກຳມະການພັກ.
23. ສະຫາຍ ນາງວັນດີ ວົງຄຳມະນີ ເປັນກຳມະການພັກ.
24. ສະຫາຍ ຈັນດີ ຈິດຕະກອນ ເປັນກຳມະການພັກ.
25.ສະຫາຍ ດຣ ນາງ ອິນລາວັນ ແກ້ວບຸນພັນ ເປັນກຳມະການພັກ.
26. ສະຫາຍ ຄຳພັນ ບຸນຈົງມີໄຊ ເປັນກຳມະການພັກ.
27. ສະຫາຍ ລາດຊະນີວົງ ອຳມາຣາທິທາດາ ເປັນກຳມະການພັກ.
28. ສະຫາຍ ບຸນທົງ ພົມມະເສນ ເປັນກຳມະການພັກ.
29. ສະຫາຍ ດຣ ທອງດຳ ໄຊພະກັດສາ ເປັນກຳມະການພັກ.

ໃນໄລຍະແຕ່ປີ 2004 ເຖິງ 2009 ຢູ່ນະຄອນຫລວງວຽງຈັນ ໄດ້ມີເຫດການເດັ່ນ ລັກສະນະສາກົນຫຼາຍເຫດການ ແຕ່ອັນສຳຄັນ ກວ່າໝູ່ແມ່ນ 4 ເຫດການ ດັ່ງນີ້:

1. ໄດ້ເປັນເຈົ້າພາບຈັດກອງປະຊຸມ ສຸດຍອດອາຊຽນ ຄັ້ງທີ X ໃນວັນທີ 29 ຫາ 30 ພະຈິກ 2004 ຊຶ່ງມີຜູ້ແທນຈາກບັນດາປະເທດ ອາຊຽນ ແລະ ຄູ່ເຈລະຈາ (ຍີ່ປຸ່ນ, ສປ ຈີນ, ສເກົາຫຼີ, ອິນເດຍ, ນິວຊີ ແລນ). ລວມຜູ້ແທນ, ຜູ້ຊ່ວຍວຽກ ແລະ ນັກຂ່າວ ທັງໝົດ 1600 ກວ່າຄົນ.

2. ໄດ້ເປັນເຈົ້າພາບຈັດກອງປະຊຸມ ໄອໂປ (AIPO) ຄັ້ງທີ 26 ໃນວັນທີ 18 ຫາ 23 ກັນຍາ 2005. ມີຄະນະຜູ້ແທນ ເຂົ້າຮ່ວມ ມີຄື 8 ປະເທດສະມາຊິກ, 2 ປະເທດ ສັງເກດການພິເສດ ຄື: ບຣູໄນ ແລະ ມຽນມ້າ ແລະ 8 ປະເທດ ສັງເກດການອື່ນ ລວມ ຜູ້ແທນ ແລະ ຜູ້ຊ່ວຍວຽກ ທັງໝົດ 297 ທ່ານ.

3. ໄດ້ເປັນເຈົ້າພາບກອງປະຊຸມລະດັບລັດຖະມົນຕີ ຝຣັ່ງໂກໂຟນີ (CMF) ຄັ້ງທີ 23 ຊຶ່ງ ໄດ້ໄຂຂຶ້ນໃນລະຫວ່າງ ວັນທີ 20 - 21 ພະຈິກ 2007 ທີ່ນະຄອນຫລວງວຽງຈັນ ໂດຍມີບັນດາ ລັດຖະມົນຕີ ແລະ ຫົວໜ້າຄະນະຜູ້ແທນ ຈາກ 55 ປະເທດສະມາຊິກ ແລະ 13 ປະເທດ ສັງ ເກດການຂອງອົງການ OIF ລວມ 68 ປະເທດເຂົ້າຮ່ວມ. ໃນພິທີເປີດໄດ້ມີການກ່າວຄຳປາໃສ ຕ້ອນຮັບຈາກເຈົ້າຄອງ ນະຄອນຫລວງວຽງຈັນ, ເລຂາທິການໃຫຍ່ OIF, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ແລະ ຈາກປະທານປະເທດ ແຫ່ງ ສປປ ລາວ. ການປະຊຸມຄັ້ງນັ້ນ ນອກຈາກຈະນຳເອົາໝາກຜົນອັນໃຫຍ່ຫລວງມາສູ່ ສປປ ລາວ ໃນການເສີມຂະຫຍາຍພາບ ພົດວັດທະນະທຳ ແລະ ບົດບາດຂອງລາວ ໃນທາງການເມືອງ, ເສດຖະກິດ ແລະ ການທູດຂອງ ລາວໃນເວທີໂລກ.


4. ໄດ້ເປັນເຈົ້າພາບງານມະຫາກຳ ກິລາຊີເກມ ຄັ້ງທີ 25 (9 - 18 /12/2009) ທີ່ ນະ ຄອນຫລວງວຽງຈັນ ຊຶ່ງລາຍລະອຽດມີ ດັ່ງນີ້:


ໃນເວລາ 18 ໂມງ ຂອງວັນທີ 9 ທັນວາ 2009 ທີ່ສະໜາມກິລາ ແຫ່ງຊາດໃຫຍ່ຫຼັກ 16 ເມືອງ ໄຊທານີ ນະຄອນຫລວງວຽງຈັນ ໄດ້ໄຂງານມະຫາກຳກິລາຊີເກມ ຄັ້ງທີ 25 (ວຽງຈັນ ເກມ) ທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຂຶ້ນຢ່າງຄຶກຄື້ນ, ໃຫ້ກຽດເຂົ້າຮ່ວມ ແລະ ກ່າວ ເປີດພິທີງານມະຫະກຳກິລາຊີເກມ ໂດຍແມ່ນ ພະນະ **ທ່ານ ຈູມມະລີ ໄຊຍະສອນ** ປະທານ ປະ ເທດແຫ່ງ ສປປ ລາວ, ມີ **ທ່ານ ບົວສອນ ບຸບຜາວັນ** ນາຍົກລັດຖະມົນຕີ ສປປ ລາວ, **ທ່ານ ຫວ້ຽນເຕີນຢຸ້ງ** ນາຍົກລັກຖະມົນຕີ ສສ ຫວຽດນາມ, ສົມເດັດ ພະມະຫາບໍດີ **ເຕໂຈຮຸນເຊັນ** ນາ ຍົກລັດຖະມົນຕີອານາຈັກກຳປູເຈຍ, ທ່ານ ພົນເອກ **ເທນເຊັນ** ນາຍົກລັດຖະມົນຕີສະຫະພາບ ມ້ຽນມ້າ, **ທ່ານ ອາພິສິດ ເວດຊາຊີວະ** ນາຍົກລັດຖະມົນຕີລາດຊະອານາຈັກໄທ, ພະນະທ່ານ



ທ່ານ ຈູມມະລີ ໄຊຍະສອນ ເລຂາທິການໃຫຍ່ ພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ເຂົ້າຮ່ວມພິທີເປີດມະຫາກຳກິລາ ຊີເກມ ຄັ້ງທີ 25

ສຸລິນ ພິດສຸວັນ ເລຂາທິການໃຫຍ່ອາຊຽນ, ມີບັນດາຜູ້ນຳກິລາ, ຄູຝຶກ ແລະ ນັກກິລາ ຈາກ 11 ປະເທດ ໃນອາຊີຕາເວັນອອກສ່ຽງໃຕ້, ບັນດາຜູ້ນຳພັກ - ລັດ ແລະ ບັນດາແຂກຖືກເຊີນທັ່ງພາຍໃນ ແລະ ຕ່າງປະເທດ ຕະຫລອດຮອດປະຊາຊົນລາວບັນດາເຜົ່າ (ນະຄອນຫລວງວຽງຈັນ) 2 ໝື່ນກວ່າຄົນ ເຂົ້າຮ່ວມ. **ທ່ານ ສົມສະຫວາດ ເລັ່ງສະຫວັດ** ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ແຫ່ງ ສປປ ລາວ, ປະທານຄະນະກຳມະການຈັດງານມະຫາກຳກິລາຊີເກມ ຄັ້ງທີ 25 ໄດ້ລາຍງານສະພາບ ແລະ ປະຫວັດສາດຄວາມເປັນມາຂອງງານມະຫາກຳກິລາຊີເກມ ຄົບຮອບ 50 ປີ. ກ່ອນນີ້ ປີ 2003, ສປປ ລາວ ໄດ້ຮັບການຕົກລົງຂອງຄະນະມົນຕີ ຊີເກມມອບໃຫ້ ສປປ ລາວ ເປັນເຈົ້າພາບໃນການຈັດງານກິລາຊີເກມ ຄັ້ງທີ 25 ນີ້; ໃນງານມະຫາກຳຊີເກມ ຄັ້ງທີ 25 ນີ້, ບັນດາຜູ້ນຳນັກກິລາໄດ້ຈັດຕັ້ງເອົາ 25 ປະເພດກິລາລວມມີກວ່າ 300 ລາຍການ, ມີນັກກິລາ ຈາກ 11 ປະເທດສະມາຊິກ ຈຳນວນ 3,038 ຄົນ ເຂົ້າແຂ່ງຂັນ. ພິເສດໃນງານເປີດພິທີຊີເກມ ຄັ້ງທີ 25 ນີ້ (ວຽງຈັນເກມ) ໃນນາມເຈົ້າພາບ ຊາວນະຄອນຫລວງວຽງຈັນ ພ້ອມກັບຊາວລາວບັນດາເຜົ່າ 6 ລ້ານກວ່າດວງໃຈລ້ວນແຕ່ໄດ້ສິ່ງແຮງໃຈ, ຄວາມມີນ້ຳໃຈໄມຕີຈິດ ຊີວິດສິດຊື່ນໃນງານເປີດ ແລະ ປິດວຽງຈັນເກມ ມີການສະແດງສິລະປະ ວັນນະຄະດີຢ່າງຫຍິ່ງໃຫຍ່, ຕະການຕາ ຊຶ່ງມີນັກສະແດງ 1863 ຄົນ, ມີບັນດານັກຟ້ອນທີ່ສະທ້ອນໃຫ້ເຫັນເຖິງຊີວິດວັດທະນະທຳ - ສັງຄົມ ຂອງປະຊາຊົນລາວບັນດາເຜົ່າ, ມີນັກສະແດງ 1411 ຄົນ, ມີນັກສະແດງຟ້ອນສັງສິນໄຊ ແຫ່ງຍຸກສະໄໝ 450 ຄົນ, ບົດຟ້ອນທີ່ງນາສີຄຳ 513 ຄົນ, ບົດຟ້ອນແສງທຽນແສງທຳ 400 ຄົນ ແລະ ບົດຟ້ອນອາມາຄິດ 600 ຄົນ.







ພິທີເປີດງານ ມະຫາກຳກິລາ ຊີເກມ ຄັ້ງທີ 25 ທີ່ສະໜາມກິລາແຫ່ງຊາດ ຫຼັກ 16
ນະຄອນຫລວງວຽງຈັນ (9 - 18 / 12 / 2009)



ຊົມເຊີຍຜົນສຳເລັດ ການເປັນເຈົ້າພາບຈັດງານມະຫາກຳ ກິລາ ຊີເກມ
ຄັ້ງທີ 25 (ວຽງຈັນເກມ)

ຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ (ປີ 2006 - 2010).



ທ່ານ ສົມບັດ ເຢຍລີເຮີ ເລຂາທິການສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງ ນະຄອນຫລວງວຽງຈັນ ປີ 2008

I. ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກນະຄອນຫລວງວຽງຈັນ.

ດ້ວຍຄວາມສາມັກຄີເປັນປຶກແຜ່ນ, ເຊີດຊູຈິດໃຈເອກະລາດ, ເປັນເຈົ້າຕົນເອງເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ອົງຄະນະພັກ ນະຄອນຫລວງວຽງຈັນ ໄດ້ສືບຕໍ່ ນຳພາຈັດຕັ້ງປະຕິບັດ ແນວທາງປ່ຽນແປງໃໝ່ຂອງພັກ, ສຸມໃສ່ປັບປຸງກົນໄກຄຸ້ມຄອງເສດຖະກິດ, ສ້າງນະຄອນຫຼວງວຽງຈັນເປັນຫົວໜ່ວຍຍຸດທະສາດ, ໜ່ວຍເປັນແຜນການ - ການເງິນ ແລະ ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດ. ໄດ້ເພີ່ມທະວີບົດບາດການນຳພາຂອງພັກ, ເຊີດຊູ ຄວາມສັກສິດຂອງການຄຸ້ມຄອງລັດດ້ວຍກົດໝາຍ, ຄວາມສັກສິດໃນການຄຸ້ມຄອງມະຫາພາກຂອງລັດ ເຂົ້າໃນການກໍ່ສ້າງເສດຖະກິດຕາມກົນໄກຕະຫລາດ ສາມາດຍາດໄດ້ຜົນງານດັ່ງນີ້:

1. ໄດ້ຍູ້ແຮງການພັດທະນາເສດຖະກິດ ບົນພື້ນຖານກົນໄກຕະຫລາດ ແລະ ຕາມທ່າອ່ຽງທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ເອົາການຂະຫຍາຍກຳລັງການຜະລິດເປັນໜ້າທີ່ຕົ້ນຕໍ, ສົ່ງເສີມການຜະລິດສິນຄ້າ, ແກ້ໄຂບັນຫາການເງິນ, ບັນລຸຄາດໝາຍແຜນການ 5 ປີ ຄັ້ງທີ IV. ເຮັດໃຫ້ເສດຖະກິດຂອງ ນະຄອນຫລວງວຽງຈັນ ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນລະດັບສະເລ່ຍ 12,17% ຕໍ່ປີ ລົ້ນຄາດໝາຍ 3,17%, ລວມຍອດຜະລິດຕະພັນພາຍໃນສັງຄົມບັນລຸໄດ້ 12.180,17 ຕື້ກີບ, ລາຍໄດ້ສະເລ່ຍຕໍ່ປີປະຕິບັດໄດ້ 1.759,94 ໂດລາສະຫະລັດ ລົ້ນຄາດໝາຍ 459,94 ໂດລາສະຫະລັດ.

- ໂຄງປະກອບເສດຖະກິດ ໄດ້ຫັນປ່ຽນໄປຕາມທິດທີ່ວາງໄວ້ຢ່າງຕັ້ງໜ້າ ໃນນັ້ນ: ກະສິກຳ - ປ່າໄມ້ ເພີ່ມຂຶ້ນ 9,70% ກວມເອົາ 17,65% ຂອງGDP, ອຸດສາຫະກຳ - ກໍ່ສ້າງ ເພີ່ມຂຶ້ນ 13,30% ກວມເອົາ 45,88% ຂອງGDP ແລະ ການບໍລິການລວມທັງພາສີ ເພີ່ມຂຶ້ນ 12,09% ກວມເອົາ 36,47% ຂອງGDP.

- ໃນໄລຍະ 5 ປີ ຜ່ານມາ, ການລົງທຶນຂອງລັດ ມີທັງໝົດ 811 ໂຄງການ, ມູນຄ່າ 864,48 ຕື້ກີບ, ການລົງທຶນຈາກຕ່າງປະເທດ ມີ 849 ໂຄງການ, ມຸນຄ່າ 3.596,79 ລ້ານໂດ

ລາສະຫະລັດ, ການລົງທຶນຂອງລັດ ໄດ້ເປັນພື້ນຖານອັນສຳຄັນໃຫ້ແກ່ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ.

2. ການພັດທະນາຕາມເຂດແຄວ້ນ.

- **ເຂດເທດສະບານ:** ກະສິກຳ - ປ່າໄມ້ ກວມເອົາ 22,72% ຂອງGDP, ອຸດສາຫະກຳ ແລະ ກໍ່ສ້າງກວມເອົາ 42,28% ຂອງGDP, ການບໍລິການລວມທັງພາສີ ກວມເອົາ 35% ຂອງGDP.

- **ເຂດຊານເມືອງ ແລະ ຊົນນະບົດ:** ກະສິກຳ - ປ່າໄມ້ ກວມເອົາ 33,30% ຂອງGDP, ອຸດສາຫະກຳ ແລະ ກໍ່ສ້າງ ກວມເອົາ 38,24% ຂອງGDP, ການບໍລິການລວມທັງພາສີ ກວມເອົາ 28,46% ຂອງGDP.

3. ການພັດທະນາຕາມບັນດາຂົງເຂດ.

- ການປະຕິບັດແຜນນະໂຍບາຍພັດທະນາກະສິກຳຮອບດ້ານ, ການສົ່ງເສີມການຜະລິດເປັນສິນຄ້າ, ການຂະຫຍາຍກຳລັງການຜະລິດ ໃນຂົງເຂດກະສິກຳ - ປ່າໄມ້ ແລະ ການຫັນເປັນທັນສະໄໝ.

ການຜະລິດກະສິກຳ ມີການເຕີບໃຫຍ່ໝັ້ນທ່ຽງ, ຍອດມູນຄ່າຜະລິດຕະພັນກະສິກຳ ໄດ້ເພີ່ມຂຶ້ນ 3% ຕໍ່ປີ, ການປູກພືດຕ່າງໆ ມີການຂະຫຍາຍຕົວເພີ່ມຂຶ້ນ, ທຽບແຜນການປະຕິບັດໄດ້ 2 ເທົ່າຕົວ. ສ່ວນການຜະລິດເຂົ້າປະຕິບັດໄດ້ພຽງ 28,82%, ຍ້ອນຜົນກະທົບຈາກໄພນ້ຳຖ້ວມ, ແຕ່ການຕອບສະໜອງຄວາມຕ້ອງການບໍລິໂພກເຂົ້າພາຍໃນ ກໍຍັງສາມາດກຸ້ມກິນໂດຍພື້ນຖານ. ການຜະລິດກະສິກຳ ເປັນສິນຄ້າຂະຫຍາຍຕົວຢ່າງແຂງແຮງຫລາຍດ້ານ ເຊັ່ນ: ເຂົ້າຈ້າວ ເພີ່ມຂຶ້ນ 4 ເທົ່າຕົວ, ມັນຕົ້ນ ເພີ່ມຂຶ້ນ 35%, ສາລີອາຫານສັດ ເພີ່ມຂຶ້ນ 5 ເທົ່າຕົວ, ພືດຕະກຸນຖົ່ວ ເພີ່ມຂຶ້ນ 2 ເທົ່າຕົວ. ປັກໃຈໃໝ່ ແມ່ນໄດ້ສ້າງສູນບໍລິການເຕັກນິກທົ່ວໄປ ຢູ່ເມືອງໄຊທານີ, ເມືອງ ປາກງື່ມ, ສູນບໍລິການກະສິກຳສະອາດ ແລະ ກຸ່ມປູກພືດອິນຊີ ເຊັ່ນ: ປູກເຂົ້າຫອມສັງຫອງອິນຊີ ຢູ່ເມືອງ ສັງທອງ, ປູກພືດຜັກ - ໝາກໄມ້ອິນຊີ ຢູ່ບາງເມືອງທີ່ມີເງື່ອນໄຂສາມາດສ້າງລາຍຮັບໄດ້ 11 ຕື້ກວ່າກີບ. ການລ້ຽງສັດ ເພີ່ມຂຶ້ນ 12% ຕໍ່ປີ, ທຽບແຜນການ 5 ປີຜ່ານມາ ເພີ່ມຂຶ້ນ 19%, ກວມເອົາ 64% ຂອງລວມຍອດຜະລິດຕະພັນກະສິກຳ ໃນນັ້ນ: ລ້ຽງປາ ເພີ່ມຂຶ້ນ 30%, ລ້ຽງໄກ່ປະຕິບັດ ໄດ້ 113% ຂອງແຜນການ, ລ້ຽງໝູ ເປັນຟາມ ເພີ່ມຂຶ້ນ 3 ເທົ່າຕົວ ຈາກ 57 ຟາມ ມາເປັນ 191 ຟາມ. ປັດໃຈໃໝ່ສຳລັບການລ້ຽງສັດ ແມ່ນການລ້ຽງກຸ້ງເປັນຟາມ ສາມາດສະໜອງກຸ້ງສົດໃຫ້ຕະຫລາດ 180 ໂຕນຕໍ່ປີ. ຜົນການຜະລິດກະສິກຳ ໄດ້ເປັນສິນຄ້າສົ່ງອອກ ແລະ ຊົມໃຊ້ພາຍໃນມີຈຳນວນ ແລະ ມູນຄ່າເພີ່ມຂຶ້ນ, ຕົວແບບການຜະ

ລິດກະສິກຳ ແບບອິນຊີ, ປອດສານພິດ ແລະ ສະອາດ ໄດ້ຈັດຕັ້ງຂຶ້ນເປັນກຸ່ມ ແລະ ຂະຫຍາຍຕົວເພີ່ມຂຶ້ນ.

ນະໂຍບາຍຢຸດຕິການຖາງປ່າເຮັດໄຮ່, ມອບດິນ - ມອບປ່າ ແລະ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ປະຕິບັດໄດ້ 1.021 ຄອບຄົວ, ເນື້ອທີ່ 2.551 ຮຕ. ມີດິນຈຳນວນ 2.096 ຕອນ, ເນື້ອທີທັງໝົດ 9.076,49 ຮຕ, ຊຸກຍູ້ການປູກໄມ້ອຸດສາຫະກຳ ໃນ 5 ປີ ໄດ້ 5.366 ຮຕ, ໄດ້ມີໜໍ່ແໜງການປູກໄມ້ 3.484 ແມັດກ້ອນ ແລະ 37.590 ໂຕນ.

- ການປະຕິບັດແຜນຍຸດທະສາດ ທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ການລົງທຶນເຂົ້າໃນຂົງເຂດອຸດສາຫະກຳເພີ່ມຂຶ້ນ, ມູນຄ່າເພີ່ມຂຶ້ນໃນທົ່ວຂະແໜງການສະເລ່ຍ 13% ກວມເອົາ 45,88% ຂອງGDP. ປະຈຸບັນ ນະຄອນຫລວງວຽງຈັນ ມີໂຮງງານ ແລະ ໂຮງຊ່າງຫັດຖະກຳ 2.308 ແຫ່ງ ໃນນັ້ນ: ໂຮງງານອຸດສາຫະກຳຂະໜາດນ້ອຍ ກວມເອົາ 89,30%, ໂຮງງານຂະໜາດກາງ ກວມເອົາ 6%, ໂຮງງານຂະໜາດໃຫຍ່ ກວມເອົາ 4,70%. ກຳມະກອນ ທັງໝົດ 46.861 ຄົນ, ຍິງ 30.413 ຄົນ. ຫົວໜ່ວຍທຸລະກິດ ການຄ້າ ມີທັງໝົດ 31.794 ຫົວໜ່ວຍ ທຽບໃສ່ ປີ 2005 ເພີ່ມຂຶ້ນ 67,57%. ຕະຫລາດທົ່ວ ນະຄອນຫລວງວຽງຈັນ ມີທັງໝົດ 83 ແຫ່ງ, ໄດ້ຂະຫຍາຍຕົວຕາມທິດທີ່ໄດ້ກຳນົດໄວ້, ສະພາບການເໜັງຕີງຂອງລາຄາສິນຄ້າທຸກປະເພດໃນທ້ອງຕະຫລາດ ຢູ່ໃນເກນທີ່ຄວບຄຸມໄດ້; ສິນຄ້າສົ່ງອອກອຸດສາຫະກຳ ແລະ ຫັດຖະກຳ ກວມອັດຕາສ່ວນ 55,04%; ຜະລິດຕະພັນໄມ້ ແລະ ແຮ່ທາດສົ່ງອອກ ກວມເອົາ 44,96% ທຽບໃສ່ປີ 2005 ເພີ່ມຂຶ້ນ 2,28 ເທົ່າຕົວ ແລະ ລວມຍອດຜະລິດຕະພັນຫັດຖະກຳ ທີ່ເປັນມູນເຊື້ອຂອງປະຊາຊົນ ເພີ່ມຂຶ້ນ 10,2%.

- ການພັດທະນາຊັບພະຍາກອນມະນຸດ, ປະຕິບັດນະໂຍບາຍສັງຄົມ ແລະ ຮັກສາມໍລະດົກວັດທະນະທຳຂອງຊາດ.

ທົ່ວນະຄອນຫລວງວຽງຈັນ ມີໂຮງຮຽນ ທັງໝົດ 832 ແຫ່ງ, ໃນນັ້ນ: ມີໂຮງຮຽນວິຊາຊີບ 1 ແຫ່ງ, ໂຮງຮຽນອານຸບານ ມີ 197 ແຫ່ງ, ກວມເອົາ 40,12%; ໂຮງຮຽນປະຖົມ ມີ 499 ແຫ່ງ, ກວມ 101,6% ແລະ ໂຮງຮຽນມັດທະຍົມ 136 ແຫ່ງ ກວມເອົາ 27,7% ທຽບໃສ່ຈຳນວນບ້ານທັງໝົດ. ມາຮອດປະຈຸບັນ ນະຄອນຫລວງວຽງຈັນ ສາມາດບັນລຸການສຶກສາ ເພື່ອໝົດທຸກຄົນ ແລະ ໄດ້ລຶບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຈົບຊັ້ນປະຖົມ ບັ້ນທີ 2 ທຽບໃສ່ແຜນການສຳເລັດ 100% ໃນຈຳນວນ 332 ບ້ານ ແລະ ຈັດຕັ້ງບຳລຸງຈົບຊັ້ນມັດທະຍົມຕົ້ນ ໃຫ້ກຸ່ມເປົ້າໝາຍ 15 - 35 ປີ ໄດ້ຈຳນວນ 5.494 ຄົນ ໃນ 196 ບ້ານ.

ການສ້າງຄອບຄົວ ແລະ ຮັບຮອງປະກາດບ້ານວັດທະນະທຳ, ມາຮອດປະຈຸບັນມີບ້ານວັດທະນະທຳ ທັງໝົດ 100 ກວ່າບ້ານ. ສ້າງຫໍສະມຸດ ໄດ້ 1 ແຫ່ງ, ສຳເລັດການກໍ່ສ້າງສະຖານີວິທະຍຸ FM1, FM2, ນຳໃຊ້ລະບົບດີຈີຕອນ ກວມ 80% ເຂົ້າໃນການເກັບກຳຂໍ້ມູນ - ຂ່າວສານ ເຮັດໃຫ້ຄຸນນະພາບ ແລະ ປະລິມານຂອງວຽກງານຖະແຫຼ່ງຂ່າວ ໄດ້ຮັບການພັດທະນາດີຂຶ້ນ.

- ນະຄອນຫລວງວຽງຈັນ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

ໂດຍສືບຕໍ່ທັນລົງກໍ່ສ້າງຮາກຖານການເມືອງ ສຸມໃສ່ປັບປຸງວຽກງານ ປກຊ - ປກສ ທົ່ວປວງຊົນຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ; ສຶກສາອົບຮົມແນວຄິດ ໃຫ້ປວງຊົນຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມຂະບວນການ ປກສ - ປກຊ ຢ່າງຕັ້ງໜ້າ. ຄະນະພັກທຸກໆຂັ້ນ ເປັນຕົ້ນ ຢູ່ຮາກຖານແມ່ນໄດ້ປຸກລະດົມ, ຊຸກຍູ້ໃຫ້ປະຊາຊົນ ປະຕິບັດພັນທະສິ່ງລູກຫລານຂອງຕົນ ເປັນທະຫານພັນທະ ໄດ້ 2.400 ຄົນ.

ສ້າງບ້ານປ້ອມໝັ້ນສູ້ຮົບ ໄດ້ 125 ບ້ານ, ກຸ່ມບ້ານສູ້ຮົບຕິດລຽນ 15 ກຸ່ມ; ໄດ້ເພີ່ມ ທະວີກວດກາ ແລະ ຄຸ້ມຄອງສຳມະໂນຄົວ, ກຳແໜ້ນການເຄື່ອນໄຫວຂອງສັດຕູ, ແກ້ໄຂເປົ້າໝາຍບໍ່ດີ ແລະ ປົດໄຈໜໍ່ແໜງທີ່ກໍ່ຄວາມບໍ່ສະຫງົບໄດ້ໂດຍພື້ນຖານ; ເອົາໃຈໃສ່ປັບປຸງວຽກງານຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ, ການປ້ອງກັນເວນຍາມ ແລະ ຮັກສາຄວາມສະຫງົບໃນກອງປະຊຸມທີ່ສຳຄັນຂອງສາກົນ, ພາກພື້ນ, ວັນສຳຄັນຂອງຊາດ - ຂອງພັກ. ງານມະຫະກຳກິລາຊີເກມ ຄັ້ງທີ 25 ທີ່ລາວເປັນເຈົ້າພາບ ມີຄວາມສະຫງົບປອດໄພ100%.

- ການບູລະນະລັດ ປະຊາທິປະໄຕ ປະຊາຊົນ ຕາມທິດສ້າງລັດແຫ່ງກົດໝາຍ.

ອົງການປົກຄອງ ນະຄອນຫລວງວຽງຈັນ ໄດ້ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວບໍລິຫານ, ເອົາໃຈໃສ່ຄົ້ນຄວ້າຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ເປັນ 13 ແຜນງານ, 160 ໂຄງການ. ປັບປຸງ, ດັດແປງຂັ້ນຕອນການບໍລິຫານລັດ ໂດຍຕິດພັນກັບການປັບປຸງກົງຈັກບໍລິຫານຢູ່ຂັ້ນຕ່າງໆ ໃຫ້ດີຂຶ້ນ, ຈັດແບ່ງປະເພດເມືອງ.

+ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ I ໃນຖານະເປັນເສນາທິການໃຫ້ສະພາແຫ່ງຊາດ ກໍ່ໄດ້ສຸມຄວາມພະຍາຍາມປະຕິບັດພາລະບົດບາດ, ໜ້າທີ່; ເປັນອົງການຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນ; ເປັນອົງການອຳນາດແຫ່ງລັດ, ຕິດຕາມກວດກາການເຄື່ອນໄຫວ ຂອງອົງການບໍລິຫານ, ສານປະຊາຊົນ ແລະ ໄອຍະການປະຊາຊົນ.

+ ວຽກງານຍຸດຕິທຳ ໄດ້ຮັບການເສີມຂະຫຍາຍລົງສູ່ຮາກຖານ, ສ້າງ ແລະ ປັບປຸງໜ່ວຍໄກ່ເກ່ຍຂັ້ນບ້ານ ສຳເລັດແລ້ວທຸກໆບ້ານ, ສ້າງບ້ານປອດຄະດີ ໄດ້ 127 ບ້ານ ເທົ່າກັບ 25% ຂອງຈຳນວນບ້ານທັງໝົດ.

+ ອົງການນໄອຍະການປະຊາຊົນ ໄດ້ເອົາໃຈໃສ່ເຄື່ອນໄຫວຕາມ 2 ພາລະບົດບາດຕົ້ນຕໍ ຄື: ການຕິດຕາມກວດກາ, ການເຄົ່າລົບ, ການປະຕິບັດກົດໝາຍ ແລະ ການສັ່ງຟ້ອງຜູ້ຕ້ອງຫາຂຶ້ນສານ, ຮັບປະກັນຜູ້ກະທຳຜິດ ໄດ້ຮັບການລົງໂທດຕາມກົດໝາຍ ແນໃສ່ເຮັດໃຫ້ການ ຕິດຕາມກວດກາປະຕິບັດກົດໝາຍ ໃຫ້ມີປະສິດທິຜົນ.

- ເສີມຂະຫຍາຍມູນເຊື້ອຄວາມສາມັກຄີປວງຊົນ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ກາຍເປັນສູນລວມຈິດໃຈຂອງປວງຊົນ.

+ ອົງການແນວລາວສ້າງຊາດ: ໄດ້ເອົາໃຈໃສ່ເຮັດວຽກງານແນວໂຮມຢ່າງຕັ້ງໜ້າ, ເປັນເຈົ້າການສຶກສາອົບຮົມນຳພາແນວຄິດ ແລະ ເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເຈົ້ານາຍ - ເຈົ້າເລົ່າ, ຫົວໜ້າຊົງຊາວ, ເພດໄວ ນັບທັງຄົນລາວຢູ່ຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ມາຫາກິນຢູ່ ນະຄອນຫລວງວຽງຈັນ. ປະຕິບັດນະໂຍບາຍຄວາມສະເໝີພາບລະຫວ່າງເຜົ່າຕ່າງໆ, ປະຕິບັດສິດໃນການເຊື່ອຖືສາສະໜາຂອງພົນລະເມືອງລາວ, ປົກປ້ອງ ແລະ ຄຸ້ມຄອງການເຄື່ອນໄຫວສາສະໜາຕາມລຳດັບ92/ນຍ, ປັບປຸງການຈັດຕັ້ງແນວລາວສ້າງຊາດຂັ້ນບ້ານ ໃຫ້ເຄື່ອນໄຫວພາລະບົດບາດ ສ້າງກອງທຶນຊ່ວຍເຫລືອເຊິ່ງກັນ ແລະ ກັນ, ປຸກລະດົມອົງການພຸດທະສາສະໜາສຳພັນລາວ ແລະ ສາສະໜາອື່ນໆ. ປະກອບສ່ວນວັດຖຸປັດໄຈປະຕິສັງຂອນວັດວາອາຮາມ ພ້ອມທັງປະກອບສ່ວນທຶນຮອນຊ່ວຍເຫລືອແກ້ໄຂຄວາມທຸກຍາກຂອງປະຊາຊົນ ເປັນຢ່າງດີ.

+ ຄະນະຊາວໜຸ່ມ: ຈຳນວນສະມາຊິກຊາວໜຸ່ມ ປະຊາຊົນ ປະຕິວັດລາວ ມີ 83.105 ສະຫາຍ, ຍິງ 49.988 ສະຫາຍ ກວມ 37,89% - 37,9% ຂອງຈຳນວນໄວໜຸ່ມທັງໝົດ, ຈຳນວນສະມາຊິກຊາວໜຸ່ມ ຂະຫຍາຍໃໝ່ 22.288 ສະຫາຍ, ຍິງ 13.583 ສະຫາຍ ກວມ 56,23% ຂອງຈຳນວນໄວເຍົາວະຊົນທັງໝົດ. ຄະນະຊາວໜຸ່ມ ໄດ້ເອົາໃຈໃສ່ຊຸກຍູ້ຂະບວນການປະຕິບັດຄຳຂວັນ 2 ສາມັກຄີ, 3 ດີ 4 ພັດທະນາ.

+ ສະຫະພັນແມ່ຍິງກວມ: ມີສະມາຊິກ ທັງໝົດ 127.963 ສະຫາຍ ກວມ 52,23% ຂອງແມ່ຍິງ ອາຍຸ 15 ປີ ຂຶ້ນໄປ, ຄະນະສະຫະພັນແມ່ຍິງແຕ່ລະຂັ້ນ ເອົາໃຈໃສ່ປະຕິບັດຂໍ້ແຂ່ງຂັນ 3 ດີ, ກໍ່ສ້າງ ແລະ ປັບປຸງການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ, ຂະຫຍາຍສະມາຊິກ ໄດ້ 22.310 ສະຫາຍເທົ່າກັບ 17,43% ຂອງຈຳນວນສະມາຊິກທັງໝົດ. ສ້າງຄອບຄົວໃຫ້ມີຄວາມ

ຜາສຸກ ໄດ້ 67.000 ກວ່າຄອບຄົວ ເທົ່າກັບ 52,35% ຂອງຈຳນວນຄອບຄົວເປົ້າໝາຍ, ສ້າງ ສະມາຊິກແມ່ຍິງ 3 ດີ ໄດ້ 81,325 ຄົນ ເທົ່າກັບ 63,55% ຂອງເປົ້າໝາຍສະຫະພັນແມ່ຍິງ. ໄດ້ຝຶກອົບຮົມວິຊາຊີບ ໃຫ້ແກ່ເອື້ອຍນ້ອງແມ່ຍິງ ຜູ້ທີ່ມີລາຍຮັບຕ່ຳ, ບໍ່ມີວຽກເຮັດງານທຳ ໄດ້ 3.654 ຄົນ ໄດ້ສ້າງຕັ້ງກອງທຶນເງິນຫ້ອນ ເພື່ອແກ້ໄຂຄວາມທຸກຍາກ ໄດ້ 453 ກຸ່ມ, ມີເງິນຫ້ອນ ທັງໝົດ 149.038.836.464 ກີບ.

+ ສະຫະພັນກຳມະບານ: ຈຳນວນສະມາຊິກກຳມະບານ ມີ 9.918 ຄົນ, ຍິງ 4.856 ຄົນ ທຽບໃສ່ປີ 2005 ເພີ່ມຂຶ້ນ 1.448 ຄົນ, ຍິງ 532 ຄົນ ໃນນີ້: ສະມາຊິກກຳມະບານຢູ່ໂຮງງານ ມີ 4.315 ຄົນ, ຍິງ 220 ຄົນ. ຄະນະພັກຮາກຖານກຳມະບານລາວແຕ່ລະຂັ້ນ ໄດ້ເອົາໃຈໃສ່ປຸກ ລະດົມສະມາຊິກປະຕິບັດຄຳຂວັນ 2 ດີ ແລະ 5 ເປັນເຈົ້າຂອງສະຫະພັນກຳມະບານລາວວາງ ອອກ ແລະ ເຮັດໜ້າທີ່ຂົນຂວາຍ, ເຕົ້າໂຮມ, ຈັດຕັ້ງສຶກສາອົບຮົມກຳມະກອນ, ເປັນຕົວແທນ ປົກປ້ອງສິດຜົນປະໂຫຍດ ອັນຊອບທຳຂອງຊາວຜູ້ອອກແຮງງານ.

+ ສະຫະພັນນັກຮົບເກົ່າ: ເປັນເຈົ້າການຊ່ວຍໃນການສຶກສາອົບຮົມ ຄົນລຸ້ນໃໝ່ ໃຫ້ຮັບຮູ້ ຄຸນງາມຄວາມດີຂອງບັນພະບູລຸດ, ວິລະຊົນແຫ່ງຊາດ, ນັກຮົບປະຕິວັດຜູ້ທີ່ມີຜົນງານ ແລະ ເສຍສະຫລະ ເພື່ອປະເທດຊາດ, ເພື່ອປະຊາຊົນ.

- ການພົວພັນ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ.

ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາ ມັກຄີແບບພິເສດອັນເປັນມູນເຊື້ອ ແລະ ຮ່ວມມືຮອບດ້ານກັບບັນດາເພື່ອນມິດຍຸດທະສາດ ກ່ຳຄື ບັນດານະຄອນ ຂອງປະເທດຮ່ວມອຸດົມການສັງຄົມນິຍົມ, ພາກພື້ນ ແລະ ສາກົນ. ໄດ້ຈັດຕັ້ງ ຜັນຂະຫຍາຍສັນຍາຮ່ວມມືລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ, ສປ ຈີນ, ບັນດານະ ຄອນ ແລະ ແຂວງ ອື່ນໆ ຂອງສອງປະເທດ. ປະຕິບັດໂຄງການຮ່ວມມືການຜະລິດ ແລະ ຈຳ ໜ່າຍສິນຄ້າ, ສາມາດປະສົບຜົນສຳເລັດຫລາຍດ້ານ. ພິເສດແມ່ນໂຄງການກໍ່ສ້າງໂຮງຮຽນມັດ ທະຍົມສົມບູນ ມິດຕະພາບລາວ - ຫວຽດນາມ ມູນຄ່າ 48 ຕື້ກີ, ໂຄງການກໍ່ສ້າງໂຮງຮຽນທິດ ສະດີການເມືອງ - ການປົກຄອງ ນະຄອນຫລວງວຽງຈັນ ມູນຄ່າ 2 ລ້ານໂດລາສະຫະລັດ.

ວຽກງານພັກ - ພະນັກງານ

1. ດ້ານການເມືອງ, ແນວຄິດ, ທິດສະດີ ແລະ ພຶດຕິກຳ.

ໂດຍຍຶດໝັ້ນທັດສະນະຂອງພັກ, ສ້າງຮາກຖານພັກໃຫ້ເຂັ້ມແຂງ ທັງ 4 ດ້ານ ແລະ ຮັ້ນຳ ພາຕາມ 5 ເນື້ອໃນ, ໄດ້ຍົກສູງຄຸນທາດການເມືອງ, ລະບຽບກົດໝາຍຂອງລັດ, ຈັດຕັ້ງຄົ້ນຄວ້າ

ຮ່ຳຮຽນ, ບຳລຸງຍົກລະດັບທາງດ້ານທິດສະດີການເມືອງ - ການປົກຄອງ ໃຫ້ພະນັກງານນຳພາ, ຄຸ້ມຄອງ, ພະນັກງານຫລັກແຫຼ່ງຢ່າງເປັນລະບົບ ນັບແຕ່ຊັ້ນຕົ້ນເຖິງຊັ້ນສູງ ໄດ້ 18 ຊຸດ, ມີຜູ້ເຂົ້າຮຽນ 1.000 ກວ່າສະຫາຍ. ບຳລຸງຖັນແຖວຄູອາຈານ ແລະ ຜູ້ເຮັດວຽກງານການເມືອງ - ແນວຄິດ, ເລຂາໜ່ວຍພັກບ້ານ, ນາຍບ້ານ ແລະ 7 ຂະແໜງການຂັ້ນບ້ານ. ຝຶກອົບຮົມຍົກລະດັບທິດສະດີການເມືອງໄລຍະສັ້ນ ໄດ້ 42 ຄັ້ງ, ມີຜູ້ເຂົ້າຮ່ວມ 3.240 ຄົນ, ຍິງ 637 ຄົນ.

2. ການຈັດຕັ້ງພັກທຸກຂັ້ນໄດ້ຮັບການປັບປຸງສອດຄ່ອງກັບໜ້າທີ່ການເມືອງໄລຍະໃໝ່.

ປະຈຸບັນ ນະຄອນຫລວງວຽງຈັນ ມີ 858 ໜ່ວຍພັກ ທຽບປີ 2005 ເພີ່ມຂຶ້ນ 165 ໜ່ວຍ, ໜ່ວຍພັກເຂັ້ມແຂງ - ຮູ້ນຳພາຮອບດ້ານ 320 ໜ່ວຍ ເພີ່ມຂຶ້ນ 67 ໜ່ວຍ ທຽບປີ 2009 ເທົ່າກັບ 37,29%, ມີສະມາຊິກພັກ 12.396 ສະຫາຍ, ຍິງ 3.214 ສະຫາຍ ທຽບປີ 2005 ເພີ່ມຂຶ້ນ 3.829 ສະຫາຍ, ຍິງ 1.252 ສະຫາຍ; ໃນນັ້ນ: ຢູ່ຂັ້ນບ້ານ ມີ 4.737 ສະຫາຍ. ຂະຫຍາຍມະຫາຊົນຜູ້ກ້າວໜ້າເຂົ້າພັກ ໄດ້ 1.491 ສະຫາຍ, ຍິງ 482 ສະຫາຍ. ຜ່ານການຕີລາຄາແບ່ງປະເພດ ໃນປີ 2009 ມີສະມາຊິກພັກແຂງຮອບດ້ານ ກວມ 28,98%, ແຂງ 29,44%, ກາງ 12,06%, ອ່ອນ 0,45%, ບໍ່ໄດ້ຈັດປະເພດ 29,09%.

3. ແບບແຜນການນຳພາ ຂອງຄະນະພັກແຕ່ລະຂັ້ນ ໄດ້ຮັບການປັບປຸງ, ຍຶດໝັ້ນຫຼັກການລວມສູນ ປະຊາທິໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ກວດກາຄະນະພັກ, ສະມາຊິກພັກ, ສະມາຊິກພັກເປັນປົກກະຕິ, ເຊີດຊູຄວາມຮັບຜິດຊອບ, ຄວາມເປັນແບບຢ່າງຂອງຄະນະພັກ, ສະມາຊິກພັກໃນການລົງຕິດແທດ ກັບຂະບວນການຂອງມະຫາຊົນ ຖືສຳຄັນວຽກງານຄຸ້ມຄອງ ແລະ ປ້ອງກັນພັກ. ແກ້ໄຂບັນຫາຫຍໍ້ທໍ້ພາຍໃນພັກ, ເອົາຜູ້ເຊື່ອມຄຸນປ່ຽນທາດອອກຈາກການຈັດຕັ້ງພັກ ມີຈຳນວນ 186 ສະຫາຍ, ຍິງ 30 ສະຫາຍ.

4. ທົ່ວນະຄອນຫລວງວຽງຈັນ ມີພະນັກງານ ທັງໝົດ 14.517 ຄົນ, ຍິງ 7.380 ຄົນ ທຽບໃສ່ ປີ 2005 ເພີ່ມຂຶ້ນ 6.521 ຄົນ, ຍິງ 3.675 ຄົນ ເທົ່າກັບ 81,55% ໃນນັ້ນ: ຊັ້ນປະລິນຍາເອກ, ປະລິນຍາໂທ, ເໜືອປະລິນຍາໂທ 265 ຄົນ, ຍິງ 83 ຄົນ; ຊັ້ນປະລິນຍາຕີ ແລະ ລົງເລິກຂະແໜງ 2.797 ຄົນ, ຍິງ 1.281 ຄົນ; ຊັ້ນສູງ 2.3150 ຄົນ, ຍິງ 883 ຄົນ; ຊັ້ນກາງ 7.340 ຄົນ, ຍິງ 4.266 ຄົນ, ຊັ້ນຕົ້ນ 1.477 ຄົນ, ຍິງ 700 ຄົນ; ບໍ່ມີຊັ້ນວິຊາສະເພາະ 488 ຄົນ, ຍິງ 167 ຄົນ. ພະນັກງານໄປຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 1.038 ຄົນ.

5. ເອົາໃຈໃສ່ຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ເລກທີ 09/ກມສພ ໂດຍການຫັນເອົາພະນັກງານລົງກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານຢ່າງຕັ້ງໜ້າ, ປະຕິບັດ 4 ເນື້ອໃນ, 4 ຄາດໝາຍ. ປັບປຸງ, ກໍ່ສ້າງລະບົບການເມືອງຢູ່ຮາກຖານມີຄວາມເຕີບໃຫຍ່ ສາມາດນຳ

ພາ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພັກ, ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຕິດພັນກັບການຜະລິດເປັນສິນຄ້າ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໄດ້ 866 ຄອບຄົວ. ປະຕິບັດໂຄງການຂອງກຸ່ມບ້ານພັດທະນາ ໄດ້ 177 ໂຄງການ ໃນ 203 ໂຄງການ, ນຳໃຊ້ທຶນ 64,52 ຕື້ກີບ. ກອງທຶນພັດທະນາບ້ານ ໄດ້ຮັບການສ້າງຕັ້ງຂຶ້ນ ມີທຶນ ທັງໝົດ 199 ກວ່າຕື້ກີບ. ມາຮອດປະຈຸບັນ ສ້າງບ້ານປອດຢາເສບຕິດ ໄດ້ 41 ບ້ານ; ບ້ານສາທາລະນະສຸກແບບຢ່າງ 400 ບ້ານ, ປະກາດບ້ານວັດທະນະທຳ ໄດ້ 100 ກວ່າບ້ານ ໃນນັ້ນ: ມີກຸ່ມບ້ານວັດທະນະທຳ 4 ກຸ່ມ, ຮັບຮອງປະກາດບ້ານພັດທະນາ 72 ບ້ານ, ມີກຸ່ມພັດທະນາຮອບດ້ານ 3 ກຸ່ມ, ໂຮມບ້ານ ຈາກ 500 ບ້ານ ຍັງເຫລືອ 491 ບ້ານ, ໂຮມກຸ່ມບ້ານ ຈາກ 62 ກຸ່ມຍັງເຫລືອ 59 ກຸ່ມ.

ທິດທາງກໍ່ສ້າງພັກ - ພະນັກງານ

1. ຍົກສູງຄຸນນະພາບການນຳພາ ຂອງຄະນະພັກທຸກຂັ້ນ, ການຈັດຕັ້ງຮາກຖານພັກ ສ້າງໃຫ້ມີຖັນແຖວພະນັກງານ, ສະມາຊິກພັກ ທີ່ມີຄວາມຮູ້, ຄວາມສາມາດ, ມີຄວາມຕັ້ງຕໍ່ບໍລິສຸດຕໍ່ພັກ, ຕໍ່ປະເທດຊາດ ເຮັດສຳເລັດ, ໜ້າທີ່ວຽກງານທີ່ພັກ ແລະ ລັດມອບໝາຍໃຫ້.

2. ເພີ່ມທະວີຄວາມສາມັກຄີ ພາຍໃນພັກໃຫ້ໜັກແໜ້ນ ເຂັ້ມແຂງ ແລະ ປອດໄສ.

3. ສ້າງບຸກຄະລາກອນ ໃຫ້ແກ່ໂຄງປະກອບ ຂອງຄະນະພັກ ຂັ້ນຕ່າງໆ ມີຄວາມໜັກແໜ້ນ ແລະ ສົມຄູ່ກັບໜ້າທີ່ການເມືອງໃນໄລຍະໃໝ່.

4. ເພີ່ມທະວີຄວາມເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດ ແລະ ຊີ້ນຳ - ນຳພາ ວຽກງານກໍ່ສ້າງຮາກຖານການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ໂດຍຖືເປັນມາດຕະການຍຸດທະສາດ, ພື້ນຖານຍາວນານ, ໂດຍກົງ, ປົກກະຕິ, ຕໍ່ເນື່ອງ ໂດຍສືບຕໍ່ສ້າງ ແລະ ບູລະນະລະບອບ ປະຊາທິໄຕ ປະຊາຊົນ. ຮັບປະກັນໃຫ້ການຈັດຕັ້ງປະຕິບັດ 4 ເນື້ອໃນ, 4 ຄາດໝາຍ ຕາມຄຳສັ່ງ 09 ຂອງກົມການເມືອງສູນກາງພັກ ແລະ ຄຳສັ່ງ ເພີ່ມເຕີມ ເລກທີ 13 ຂອງນາຍົກລັດຖະມົນຕີ.

II. ວິໄສທັດການພັດທະນານະຄອນຫລວງວຽງຈັນ.

1. ວິໄສທັດການພັດທະນາ ແຕ່ນີ້ ຮອດປີ 2030.

- ວິໄສທັດທີ ໜຶ່ງ: ເປັນສູນກາງພູມມີພາກໃນອະນຸພາກພື້ນແມ່ນ້ຳຂອງ.

+ ເປັນຜູ້ຮັບການຍົກຍ້າຍດ້ານອຸດສາຫະກຳ ພາຍໃຕ້ພາກສ່ວນສາຍຂວາງ ຂອງແຮງງານໃນອະນຸພາກພື້ນແມ່ນ້ຳຂອງ.

+ ເປັນສາຂາພາກເໜືອຂອງບໍລິສັດທົ່ວໂລກ.

+ ເປັນສູນກາງການຄ້າພາກພື້ນ.

- **ວິໄສທັດທີ ສອງ**: ເປັນສູນກາງຂອງຊາດ.

+ ເປັນສູນກາງການເມືອງ ແລະ ການປົກຄອງ.

+ ເປັນສູນກາງທາງດ້ານເສດຖະກິດ.

+ ເປັນສູນກາງດຶງດູດປະຊາກອນ ແລະ ການວ່າຈ້າງທີ່ບໍ່ແມ່ນດ້ານກະສິກຳ.

+ ເປັນປະຕູອອກສູ່ສາກົນສຳລັບສິນຄ້າ ແລະ ປະຊາຊົນ.

- **ວິໄສທັດທີ ສາມ**: ເປັນເມືອງທີ່ໜ້າຢູ່ ແລະ ມີສະເໜ່.

+ ຄວາມຍືນຍົງ.

+ ຫລຸດຜ່ອນຄວາມໜາແໜ້ນ ແລະ ເປັນມິດກັບສິ່ງແວດລ້ອມ.

+ ມີພື້ດທີ່ອຸດົມສົມບູນ ແລະ ນ້ຳອ້ອມຮອບ.

+ ການດຳລົງຊີວິດທີ່ສະດວກສະບາຍ.

+ ມີເອກະລັກ ວັດທະນະທຳ ພ້ອມສະຖາປັດຕະຍະກຳປະຫວັດສາດ, ວັດທະນະທຳ ແລະ ທິວທັດຕົວເມືອງ.

2. ວິໄສທັດການພັດທະນາ ແຕ່ນີ້ ຮອດປີ 2020.

ພວກເຮົາສືບຕໍ່ຢືນຢັນຄືນຄາດໝາຍສູ້ຊົນ ຮອດປີ 2020 ສ້າງນະຄອນຫລວງວຽງຈັນເປັນໃຈກາງທາງດ້ານການເມືອງ, ເປັນໜຶ່ງໃນບັນດາສູນເສດຖະກິດ - ວັດທະນະທຳ - ສັງຄົມ ທີ່ໄດ້ຮັບການພັດທະນາໃນອະນຸພາກພື້ນ, ສ້າງໃຫ້ເປັນໃຈກາງແຫ່ງການພັດທະກັບສາກົນ.

ເສດຖະກິດ ເຕີບໃຫຍ່ຂະຫຍາຍຕົວດ້ວຍຈັງຫວະໄວ, ໝັ້ນທ່ຽງໃນລະດັບສະເລ່ຍບໍ່ຕ່ຳກວ່າ 12%, ຍອດຜະລິດຕະພັນພາຍໃນ (GDP) ໃຫ້ບັນລຸໄດ້ 56 - 57 ພັນຕື້ກີບ, ສະເລ່ຍລາຍໄດ້ຕໍ່ປີ ບໍ່ໃຫ້ຫລຸດ 7.000 - 8.000 ໂດລາສະຫະລັດ.

ໂຄງປະກອບເສດຖະກິດ ມີຄວາມກົມກຽວລະຫວ່າງ ກະສິກຳ - ປ່າໄມ້, ອຸດສາຫະກຳ - ຫັດຖະກຳ, ປຸງແຕ່ງ ແລະ ການບໍລິການ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝແບບຍືນຍົງ, ທຸກການພັດທະນາຕ້ອງໄປຕາມຜັງເມືອງ. ພາກສ່ວນເສດຖະກິດຂອງລັດ, ເສດຖະກິດຮ່ວມມືຂອງປະຊາຊົນ ເປັນຕົວແທນຂອງກຳລັງການຜະລິດ ແລະ ແບບວິທີການຜະລິດຂອງສັງຄົມນິຍົມເປັນເຈົ້າພາທາງ.

ປະຊາຊົນບັນດາເຜົ່າ ມີສະຕິເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ມີຄວາມສາມັກຄີປອງດອງ, ມີລະດັບການສຶກສາຈົບມັດທະຍົມຕອນປາຍ, ການບໍລິການດ້ານສາທາລະນະສຸກທົ່ວເຖິງ ແລະ ມີຄຸນນະພາບ, ອາຍຸຍືນຂອງປະຊາຊົນສະເລ່ຍ 75 ປີ; ວັດທະນະທຳອັນດີງາມຂອງຊາດ, ຂອງທ້ອງຖິ່ນ ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ, ສັງຄົມມີຄວາມຍຸດຕິທຳ ແລະ ສີວິໄລ. ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ແຕ່ລະຂັ້ນໃຫ້ມີ

ຄວາມໜັກແໜ້ນເຂັ້ມແຂງ, ເຊີດຊູຄວາມສັກສິດຂອງການຄຸ້ມຄອງລັດດ້ວຍກົດໝາຍ, ສ້າງອຳນາດການປົກຄອງ ເປັນສິດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ; ສິດ ແລະ ພັນທະຂອງພົນລະເມືອງ ໄດ້ຮັບການຈັດຕັ້ງປະຕິບັດ ຖືກຕ້ອງຕາມລະບຽບກົດໝາຍ, ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີເປັນປຶກແຜ່ນ.

3. ວິໄສທັດການພັດທະນາ ນະຄອນຫລວງວຽງຈັນ ສະເພາະ (2011 - 2015).

- ເພີ່ມທະວີຄວາມສາມັກຄີ ເປັນເອກະພາບພາຍໃນພັກ, ກຳລັງປະກອບອາວຸດ ແລະ ປວງຊົນ, ເຊີດຊູນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອພັດທະນາ ນະຄອນຫລວງວຽງຈັນ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝແບບຍືນຍົງ, 9 ຕົວເມືອງ ຕ້ອງສຳເລັດການສ້າງຜັງເມືອງ ເພື່ອສ້າງເປັນແຜນແມ່ບົດລວມໃຫ້ແກ່ການ ພັດທະນາ ນະຄອນຫລວງວຽງຈັນ. ສ້າງນະຄອນຫລວງວຽງຈັນ ມີສະຖຽນລະພາບດ້ານການເມືອງ, ສັງຄົມ ມີຄວາມສະຫງົບປອດໄພ, ແກ້ໄຂປະກົດການຫຍໍ້ທໍ້ໃຫ້ຫລຸດລົງຢ່າງຈະແຈ້ງ.

- ສູ້ຊົນເຮັດໃຫ້ນະຄອນຫລວງວຽງຈັນ ຫລຸດພົ້ນອອກຈາກສະພາວະດ້ອຍພັດທະນາທັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງຈຳນວນໜຶ່ງ. ເສດຖະກິດຂະຫຍາຍຕົວ ສະເລ່ຍແຕ່ລະປີບໍ່ຫລຸດ 11 - 12%, ລວມຍອດຜະລິດຕະພັນພາຍໃນ (DGP) ໃຫ້ບັນລຸໄດ້ 23 - 26 ພັນ ປະກອບເສດຖະກິດ ໃຫ້ມີການຫັນປ່ຽນຕາມທິດທີ່ຕັ້ງໜ້າ.

+ ຂະແໜງກະສິກຳ - ປ່າໄມ້ ກວມ 17% ຂອງ GDP.

+ ຂະແໜງອຸດສາຫະກຳ ກໍ່ສ້າງ ກວມ 47% ຂອງ GDP.

+ ຂະແໜງບໍລິການ (ລວມທັງພາສີ) ກວມ 36% ຂອງ GDP.

ເພື່ອຮັບປະກັນເຮັດໃຫ້ GDP ເພີ່ມຂຶ້ນໃນລະດັບ 12% ຕໍ່ປີ, ໃນ 5 ປີ ນະຄອນຫລວງວຽງຈັນ ຕ້ອງການລົງທຶນ 53.786 ຕື້ກີບ ໃນນັ້ນ: ລະດົມການລົງທຶນໂດຍກົງຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ປະມານ 45.834 ຕື້ກີບ, ຍາດແຍ່ງເອົາການຊ່ວຍເຫລືອລ້າ ແລະ ກ້ຢືມດ້ວຍດອກເບ້ຍຕ່ຳ ຈາກບັນດາປະເທດເພື່ອນມິດ ໃຫ້ໄດ້ປະມານ 2.537 ຕື້ກີບ. ການລົງຂອງລັດໃຫ້ໄດ້ປະມານ 5.378,68 ຕື້ກີບ; ໃນນີ້: ທຶນຕ່າງປະເທດ (ODA) ປະມານ 3.662 ຕື້ກີບ ແລະ ທຶນຈາກງົບປະມານ 1.715,85 ຕື້ກີບ.

- ສູ້ຊົນປະຕິບັດດ້ານຕ່າງໆ ເພື່ອໃຫ້ບັນລຸຄາດໝາຍ ຂອງການລຶບລ້າງຄວາມທຸກ ແລະ ເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ຊຶ່ງປະກອບມີເປົ້າໝາຍໃຫຍ່ ດັ່ງນີ້:

- ລຶບລ້າງຄວາມທຸກຍາກ, ຫລຸດຜ່ອນອັດຕາສ່ວນຄວາມທຸກຫຍາກລົງ ໃຫ້ສຳເລັດໂດຍ ພື້ນຖານ, ຫລຸດຜ່ອນອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຖານໃຫ້ ຕ່ຳກວ່າ 15%.

- ສຳເລັດການສຶກສາ ຊັ້ນມັດທະຍົມຕົ້ນພາກບັງຄັບ ໃນທົ່ວນະຄອນຫລວງວຽງຈັນ ແລະ ມີສ່ວນໜຶ່ງໃຫ້ສຳເລັດມຊັ້ນມັດທະຍົມປາຍ, ອັດຕາການເຂົ້າຮຽນສຸດທີຊັ້ນປະຖົມໃຫ້ໄດ້ອັດຕາ ການເຂົ້າຮຽນຊັ້ນມັດທະຍົມຕົ້ນ ໃຫ້ໄດ້ 80%, ອັດຕາເຂົ້າຮຽນລວມຊັ້ນມັດທະຍົມປາຍ ໃຫ້ໄດ້ 55% ແລະ ອັດຕາການຮູ້ໜັງສືໃນກຸ່ມອາຍຸ 15 - 40 ປີ ໃຫ້ໄດ້ 99%.

- ສົ່ງເສີມບົດບາດ ຍິງ - ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ລຶບລ້າງ ຄວາມບໍ່ສະເໝີພາບລະຫວ່າງ ຍິງ - ຊາຍ ໃນການສຶກສາທຸກລະດັບໃຫ້ໄດ້ 100%.

- ຫລຸດຜ່ອນການເສຍຊີວິດຂອງເດັກນ້ອຍ: ອັດຕາສ່ວນການຕາຍຂອງເດັກລຸ່ມ 5 ປີ ບໍ່ ໃຫ້ເກີນ 20 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອັດຕາສ່ວນການຕາຍຂອງເດັກນ້ອຍຕ່ຳກວ່າ 1 ປີ ບໍ່ໃຫ້ເກີນ 10 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ.

- ສົ່ງເສີມສຸຂະພາບແມ່, ອັດຕາການຕາຍຂອງແມ່ບໍ່ໃຫ້ເກີນ 45 ຄົນ ຕໍ່ເດັກມີຊີວິດ 100.000 ຄົນ, ພົນລະເມືອງມີອາຍຸຍືນສະເລ່ຍ 72 ປີ.

- ສະກັດກັ້ນການແຜ່ລະບາດຂອງ HIV, ໄຂ້ຍຸງ, ພະຍາດໄຂ້ຫວັດສັດປີກ, ພະຍາດໄຂ້ ຫວັດສາຍພັນໃໝ່ 2009 ແລະ ພະຍາດຕິດຕໍ່ອື່ນໆ, ອັດຕາການຕາຍຍ້ອນໄຂ້ຍຸງບໍ່ໃຫ້ເກີນ 0,2 ຕໍ່ປະຊາກອນ 100.000 ຄົນ.

- ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ, ອັດຕາສ່ວນປະຊາກອນນຳໃຊ້ນ້ຳສະອາດ ໃນເຂດສະບານ ໃຫ້ໄດ້ 100%, ທົ່ວນະຄອນຫລວງວຽງຈັນ ໃຫ້ໄດ້ 90% ແລະ ອັດຕາສ່ວນ ປະຊາກອນຊົມໃຊ້ວິດຖ່າຍ ໃຫ້ໄດ້ 95%.

- ສ້າງຄູ່ຮ່ວມງານດ້ານການພັດທະນາ ໃນຂອບເຂດ ນະຄອນຫລວງຕ່າງໆ ຂອງບັນດາ ປະເທດອ້ອມຂ້າງ, ສ້າງສາຍພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ ເພື່ອເຮັດໃຫ້ປະຊາ ຊົນ ໄດ້ນຳໃຊ້ເຕັກໂນໂລຢີໃໝ່ ເຊັ່ນ: ການເຂົ້າເຖິງລາຍການວິທະຍຸກະຈາຍສຽງ, ການເຂົ້າເຖິງ ການຮັບຊົມໂທລະພາບ, ການນຳໃຊ້ໂທລະສັບ ແລະ ການເຂົ້າເຖິງການນຳໃຊ້ອິນເຕີເນັດ.

ພາກສະຫລຸບ

ນະຄອນຫລວງວຽງຈັນ ເປັນເມືອງໜຶ່ງທີ່ເກົ່າແກ່ ມີປະຫວັດສາດຄວາມເປັນມາອັນຍາວນານຕິດພັນກັບປະຫວັດສາດຂອງຊາດລາວ. ເລີ່ມຈາກເປັນບ້ານ ໜອງຄັນແທເສື້ອນ້ຳ ຊຶ່ງ ແມ່ນທ້າວບູລີຈັນ ເປັນຜູ້ສ້າງຂຶ້ນໄດ້ກາຍມາເປັນເມືອງວຽງຈັນບູຮານ, ເປັນນະຄອນຫລວງຂອງ ອານາຈັກສີໂຄດຕະບອງ, ອານາຈັກລາວລ້ານຊ້າງ ສືບທອດກັນມາເຖິງປະຈຸບັນນີ້. ໂດຍພາຍ ໃຕ້ການນຳພາຂອງບັນພະບູລຸດ, ວິລະກະສັດຜູ້ອົງອາດກ້າແກ່ນ ເຊັ່ນ: ເຈົ້າຟ້າງຸ່ມ ມະຫາລາດ, ເຈົ້າໄຊຍະເຊດຖາທິລາດ, ເຈົ້າສຸລິຍະວົງສາທຳມິກະລາດ, ເຈົ້າອະນຸວົງ ແລະ ຜູ້ອື່ນໆ. ຜ່ານຂະ ບວນວິວັດແຫ່ງການສ້າງຕັ້ງ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງນະຄອນຫລວງວຽງຈັນ ຫລາຍ ຍຸກຫລາຍສະໄໝ ມີທັງໄລຍະຈະເລີນຮຸ່ງເຮືອງ, ປະຊາຊົນຢູ່ເຢັນເປັນສຸກ, ມີທັງໄລຍະ ລະທົມ ຂົມຂື່ນ ຖືກທຳລາຍເຜົາຜານຈົນກາຍເປັນເມືອງຮ້າງ ແລະ ຕົກເປັນເມືອງສ່ວຍ, ເມືອງຂຶ້ນຂອງ ສັກດິນາ ແລະ ຈັກກະພັດຕ່າງດ້າວ. ວຽງຈັນນັບແຕ່ເມື້ອກຳເນີດເກີດຂຶ້ນ ແລະ ເຕີບໃຫຍ່ຂະ ຫຍາຍຕົວມາເຖິງເທົ່າທຸກວັນນີ້ ແມ່ນໄດ້ຜ່ານພົ້ນ 3 ຍຸກສະໄໝປະຫວັດສາດ ທີ່ແຕກຕ່າງກັນ ຄື: ໄລຍະເປັນເມືອງບູຮານ ແລະ ໄລຍະການກໍ່ຮ່າງສ້າງຕົວເປັນນະຄອນຫລວງ ຂອງອານາຈັກ ສີໂຄດຕະບອງ ໄດ້ຫລາຍຮ້ອຍປີ, ພັນປີ ຈົ່ງມາຮອດປີ 1353 ເຈົ້າຟ້າງຸ່ມ ມະຫາລາດ ໄດ້ທ້ອນ ໂຮມແຜ່ນດິນລາວເປັນ ***"ອານາຈັກລາວລ້ານຊ້າງ"*** ຊຶ່ງເພີ່ນໄດ້ກຳນົດເອົາເມືອງວຽງຈັນ ເປັນສູນ ກາງບ່ອນເຕົ້າໂຮມໄຜ່ພົນ ແລະ ສະຫລອງໄຊໃຫຍ່ເວລາສຳເລັດການທ້ອນໂຮມປະເທດຊາດ. ໂດຍພາຍໃຕ້ການນຳພາຂອງບັນພະບູລຸດ, ກະສັດລາວ, ປະເທດລາວລ້ານຊ້າງ, ນະຄອນ ຫລວງວຽງຈັນ ມີຫລາຍໄລຍະກໍ່ມີຄວາມສະຫງົບສຸກ ແລະ ມີຫລາຍໄລຍະກໍ່ແຕກແຍກ, ຖືກ ຮຸກຮານຈາກສັກດິນາ ແລະ ຈັກກະພັດຕ່າງດ້າວ ຈົນສູນເສຍເອກະລາດ ກາຍເປັນເມືອງຂຶ້ນ, ເມືອງສ່ວຍຂອງຕ່າງຊາດ ເຮັດໃຫ້ນະຄອນຫລວງຂອງປະເທດ ຖືກຍົກຍ້າຍໄປຕັ້ງຢູ່ ນະຄອນ ຊຽງທອງ (ຫລວງພະບາງ)ໄດ້ 207 ປີ. ມາຮອດ ປີ 1560 ເຈົ້າໄຊຍະເຊດຖາທິລາດ ຈົ່ງໄດ້ຍົກ ຍ້າຍເມືອງຫລວງຂອງອານາຈັກລາວລ້ານຊ້າງ ມາຕັ້ງຢູ່ວຽງຈັນ ໂດຍໃສ່ຊື່ວ່າ " ຈັນທະບູລີສີ ສັດຕະນາຄະນະຫຸດອຸດຕະມະລາຊະທານີ " ແລ້ວນຳພາປະຊາຊົນຕໍ່ສູ້ປົກປັກຮັກສາ, ຟື້ນຟູ ແລະ ກໍ່ສ້າງນະຄອນຫລວງວຽງຈັນ ມີຄວາມຈະເລີນຮຸ່ງເຮືອງ, ເຂັ້ມແຂງຈົນມີຊື່ສຽງໃນຍຸກນັ້ນ. ເມື່ອເຈົ້າໄຊຍະເຊດຖາທິລາດ ສິ້ນພະຊົນໄປແລ້ວ ບ້ານເມືອງກໍ່ເກີດມີຄວາມສັບສົນວຸ້ນວາຍ ຍ້ອນການຍາດຊິງກັນຂຶ້ນກຳອຳນາດຂອງກຸ່ມລາຊະວົງ ແລະ ຂຸນນາງຜູ້ໃຫຍ່ ເຮັດໃຫ້ພາຍໃນ ແຕກແຍກຄວາມສາມັກຄີ, ບໍ່ມີຄວາມສະຫງົບເປັນເຫດໃຫ້ສັກດິນາພະມ້າ ສວຍໂອກາດຍົກ ທັບເຂົ້າມາຮຸກຮານ ສຸດທ້າຍກໍ່ຕົກເປັນເມືອງສ່ວຍຂອງພະມ້າ 24 ປີ. ມາຮອດໄລຍະ ເຈົ້າສຸລິ ຍະວົງສາທຳມິກະລາດ ຂຶ້ນຄອງບັນລັງ ໃນປີ 1638 ໄດ້ນຳພາປະຊາຊົນບັນດາເຜົ່າ ປົກປັກ

ຮັກສາ ແລະ ກໍ່ສ້າງພັດທະນາ ນະຄອນຫລວງວຽງຈັນ ມີຄວາມຈະເລີນຮຸ່ງເຮືອງ ຈົນເອີ້ນວ່າ ຍຸກຄຳ, ເປັນໃຈກາງຂອງປະເທດທາງດ້ານການປົກຄອງ, ເສດຖະກິດ, ການສຶກສາ, ສິລະປະ - ວັດທະນະທຳ, ການປ້ອງກັນຊາດ ແລະ ສ້າງສາຍພົວພັນກັບຫລາຍປະເທດໃນໂລກ ເຮັດໃຫ້ ປະເທດລາວລ້ານຊ້າງ ມີຊື່ສຽງຢູ່ໃນພາກພື້ນ ແລະ ແຜ່ກວ້າງອອກ ໄປຮອດຊີກເຂດເອີຣົບ.

ເມື່ອເຈົ້າສຸລິຍະວົງສາທຳມິກະລາດ ສິ້ນພະຊົນໄປແລ້ວ ອານາຈັກລາວລ້ານຊ້າງ ກໍ່ຄືຢູ່ ນະຄອນຫລວງວຽງຈັນ ບໍ່ມີເຊື້ອກະສັດສືບທອດບັນລັງ. ພວກຂຸນນາງຜູ້ໃຫຍ່ຍາດຊີງກັນຂຶ້ນ ເປັນເຈົ້າແຜ່ນດິນ ເກີດມີການປະທັດປະຫານກໍ່ການກະບົດ ໂຄ່ນລົ້ມ, ຄາດຕະກຳ ແລະ ແຍກ ຕົວອອກເປັນອິດສະຫລະ ອັນເປັນສາເຫດໃຫ້ອານາຈັກລາວລ້ານຊ້າງ ຖືກແຍກອອກເປັນ 3 ອານາຈັກຄື: ອານາຈັກລ້ານຊ້າງວຽງຈັນ, ອານາຈັກລ້ານຊ້າງຫລວງພະບາງ ແລະ ອານາຈັກ ລ້ານຊ້າງຈຳປາສັກ. ຍ້ອນປະເທດຊາດບ້ານເມືອງ ຖືກແບ່ງແຍກ, ຂາດຄວາມສາມັກຄີ ແລະ ບໍ່ ມີຄວາມສະຫງົບ ຄືດັ່ງກ່າວນັ້ນ, ຈຶ່ງເປັນຜົນດີໃຫ້ແກ່ສັກດິນາສະຫຍາມ ສວຍໂອກາດຍົກທັບ ເຂົ້າມາຕີ ແລະ ຢຶດຄອງເອົາ 3 ອານາຈັກລາວລ້ານຊ້າງ ເປັນຫົວເມືອງຂຶ້ນ ພ້ອມໆກັນ ໃນ ປີ 1779.

ຕະຫລອດໄລຍະຕົກເປັນເມືອງສ່ວຍ, ເມືອງຂຶ້ນຂອງສັກດິນາ ແລະ ຈັກກະພັດຕ່າງ ດ້າວ ເປັນເວລາ 195 ປີ, ອັນເນື່ອງມາຈາກຄວາມແຕກແຍກຍ້ອນຂໍ້ຂັດແຍ່ງພາຍໃນກຸ່ມ ລາຊະ ວົງ ແລະ ຈາກການຮຸກຮານຂອງຈັກກະພັດ, ສັກດິນາຕ່າງດ້າວ. ຊຶ່ງໄດ້ນຳເອົາຄວາມເສຍຫາຍ ຢ່າງຫລວງຫລາຍ ມາໃຫ້ແກ່ນະຄອນຫລວງວຽງຈັນ ກໍ່ຄືປະເທດຊາດ, ນັບທັງດ້ານ ວັດທະນະ ທຳ - ສັງຄົມ, ຄວາມສະຫງົບສຸກ, ບັນດາຫໍໂຮງ, ອາຄານທີ່ສວຍສົດງົດງາມຫລາຍຮ້ອຍຫລັງ ໄດ້ຖືກເຜົາຜານເປັນຊາກສະຫລັກຫັກພັງ. ໃນນັ້ນເຫດການທີ່ໜ້າຊົງຈຳຕະຫລອດການ ກໍ່ແມ່ນ ການເຜົາຜານ ເມືອງວຽງຈັນ ຂອງສັກດິນາສະຫຍາມ ໃນເດືອນ 11/1827. ປະຊາຊົນລາວ, ຊາວນະຄອນຫລວງວຽງຈັນ ນັບເປັນຫລາຍແສນຄົນໄດ້ຖືກກວາດຕ້ອນ ແລະ ອົບພະຍົກອອກ ຈາກວຽງຈັນໄປເປັນຂ້ອຍຂ້າມ້າຕ່າງໃຫ້ແກ່ຊາດອື່ນ. ແຕ່ດ້ວຍຈິດໃຈຮັກເຊື້ອແພງຊາດ, ຮັກເອ ກະລາດ, ຮັກບ້ານເກີດເມືອງນອນ, ຊາວວຽງຈັນ ຍາມໃດກໍ່ບໍ່ໄດ້ລືດລະໃນຄວາມພະຍາຍາມ ຕໍ່ສູ້ປົກປັກຮັກສາ, ຟື້ນຟູ, ກໍ່ສ້າງ ແລະ ຍາດເອົາຄວາມເປັນເອກະລາດເຮັດໃຫ້ວຽງຈັນ ຫລຸດ ພົ້ນອອກຈາກແອກຄອບຄອງເປັນເມືອງຂຶ້ນ, ເມືອງສ່ວຍ ຂອງພວກສັກດິນາ ແລະ ຈັກກະພັດ ຕ່າງດ້າວ. ໃນນັ້ນ, ພົ້ນເດັ່ນຂະບວນການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາພະມ້າ ໂດຍພາຍ ໃຕ້ການນຳພາຂອງ ເຈົ້າໄຊຍະເຊດຖາທິລາດ, ຂະບວນການຕໍ່ສູ້ກອບກູ້ເອົາເອກະລາດ ຈາກ ສະຫຍາມ ພາຍໃຕ້ການນຳພາຂອງເຈົ້າອະນຸວົງ ປີ 1826 - 1829, ຂະບວນການຕໍ່ສູ້ຂອງ

ປະຊາຊົນ ໃນຕົວເມືອງວຽງຈັນ ພາຍໃຕ້ການນຳພາຂອງນາຍຄູຄຳ ປີ 1920 ຕ້ານການຮຸກຮານຢຶດຄອງຂອງຈັກກະພັດຝຣັ່ງ ແລະ ອື່ນໆ.

ປະຫວັດສາດ ໄລຍະໃໝ່ ນັບແຕ່ປີ 1945 ມາເຖິງປະຈຸບັນນີ້ ແມ່ນໄລຍະປະຫວັດສາດ ທີ່ມີພັກປະຊາຊົນປະຕິວັດລາວ ນຳພາຕໍ່ສູ້ປົກປັກຮັກສາ ແລະ ຍາດເອົາຄວາມເປັນເອກະລາດ ແຫ່ງຊາດ. ນະຄອນຫລວງວຽງຈັນໄດ້ໂດດເດັ່ນ ແລະ ຈະແຈ້ງຂຶ້ນທັນທີ ເມື່ອພັກຄອມມູນິດອິນດູຈີນ ແຄ້ມລາວໄດ້ກຳເນີດເກີດຂຶ້ນ ແລະ ຮັບເອົາພະລະກຳປະຫວັດສາດນຳພາປະຊາຊົນລາວ, ປະຊາຊົນນະຄອນຫລວງວຽງຈັນ ລຸກຂຶ້ນຕໍ່ສູ້ຕ້ານກັບການຮຸກຮານຂອງພວກລ່າເມືອງຂຶ້ນຝຣັ່ງແລະ ຍີ່ປຸ່ນ ຢ່າງພິລະອາດຫານ ທັງໄດ້ຮັບໄຊຊະນະເປັນກ້າວໆ, ໄລຍະນີ້ເຫດການປະຫວັດສາດ ທີ່ສຳຄັນແມ່ນຊາວນະຄອນຫລວງວຽງຈັນ ໄດ້ພ້ອມກັບລັດຖະບານລາວອິດສະຫລະປະກາດ ຄວາມເປັນເອກະລາດແຫ່ງຊາດ ໃນວັນທີ 12/10/1945 ຂຶ້ນທີ່ບ້ານ ສີຫອມ, ເມືອງ ຈັນທະບູລີ (ໃຈກາງເມືອງວຽງຈັນ). ຫລັງຈາກນັ້ນມາເຖິງປີ 1954 ພັກປະຊາຊົນປະຕິວັດລາວ ໄດ້ຈັດຕັ້ງນຳພາປະຊາຊົນ ຊາວນະຄອນຫລວງວຽງຈັນ ພ້ອມກັບທົ່ວປະເທດ ດຳເນີນການຕໍ່ສູ້ຕ້ານກັບສົງຄາມຮຸກຮານແບບໃໝ່ ຂອງຈັກກະພັດອາເມລິກາ ທີ່ມາປ່ຽນແທນລ່າເມືອງຂຶ້ນແບບເກົ່າຈັກກະຝຣັ່ງ. ໄລຍະນີ້ນະຄອນຫລວງວຽງຈັນ ໄດ້ກາຍເປັນໃຈກາງສະໜາມຮົບທາງດ້ານການເມືອງ, ການທະຫານ, ເສດຖະກິດ, ວັດທະນະທຳ - ສັງຄົມ ແລະ ການຕ່າງປະເທດ ແລະ ກໍ່ເປັນໄລຍະທີ່ດຸເດືອດ, ຂ້ຽວຂາດສັບສົນທີ່ສຸດ. ພວກຈັກກະພັດ ແລະ ລູກແຫຼ່ງຕົນມື ໄດ້ດຳເນີນການກົດຂີ່ຂູດຮີດ, ປາບປາມຈິດໃຈຮັກຊາດ ຂອງຊາວນະຄອນຫລວງວຽງຈັນ ຢ່າງໜັກໜ່ວງ. ຫລາຍຮ້ອຍ, ຫລາຍພັນຄົນຖືກເຂັ່ນຂ້າ, ທາລຸນດ້ວຍຫລາຍຮູບການ ເຊັ່ນ: ຖືກທຸບຕີທໍລະມານ, ຂົ່ມຂືນທຳສຳເລົ້າ, ແຂນຄໍ, ກະບີ່ແທງຫອງ ແລະ ອື່ນໆ ຢ່າງໂຫດຮ້າຍປ່າເຖື່ອນ. ຕໍ່ໜ້າສະພາບການດັ່ງກ່າວ ສູນກາງພັກ, ໂດຍກົງຄະນະພັກ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຂົນຂວາຍ, ປຸກລຸກປະຊາຊົນ ນະຄອນຫລວງວຽງຈັນຜູ້ຮັກຊາດ ລຸກຂຶ້ນຕໍ່ສູ້ຢ່າງພິລະອາດຫານສຸດທ້າຍ ໄດ້ພ້ອມກັບປະຊາຊົນລາວທົ່ວປະເທດ ຈັດຕັ້ງລຸກຮື້ຂຶ້ນປະທ້ວງຂັບໄລ່ຈັກກະພັດອາເມລິກາ ແລະ ລູກແຫຼ່ງຕົນມື, ໂຄ່ນລົ້ມອຳນາດການປົກຄອງເກົ່າ ທີ່ບໍ່ມີຄວາມຍຸດຕິທຳ. ໂດຍກຳແໜ້ນກາລະໂອກາດ “ ***ພັນປີມີເທື່ອໜຶ່ງ*** ” ພັກໄດ້ນຳພາປະຊາຊົນບັນດາເຜົ່າລາວ ກໍ່ຄື ຊາວນະຄອນຫລວງວຽງຈັນ ລຸກຮື້ຂຶ້ນຢຶດອຳນາດທົ່ວປະເທດແບບ“ ***ບົວບໍ່ຊ້ຳກໍ່ບໍ່ຊ່ຳແຕ່ຈັບປາໄດ້ໝົດ*** ”ດ້ວຍສາມບາດຄ້ອມ ຍຸດທະສາດ ສຳເລັດຜົນ ໃນວັນທີ 23/8/1975 ແລະ ປະກາດສ້າງຕັ້ງ ” ***ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ*** ” ໃນວັນທີ 2/12/1975 ຢ່າງສະຫງ່າຜ່າເຜີຍ.

ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປານາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນຢ່າງເປັນທາງການແລ້ວ ນັບແຕ່ ປີ 1976 ເປັນຕົ້ນມາ ແຂວງ ນະຄອນຫລວງວຽງຈັນ ໃນເມື່ອກ່ອນ, ນະຄອນຫລວງວຽງຈັນ ໃນປະຈຸບັນ ໄດ້ກາຍເປັນ ນະຄອນຫລວງຂອງປະເທດຊາດ, ເປັນທີ່ຕັ້ງອົງການນຳສູງສຸດຂອງພັກ - ລັດຖະບານ, ເປັນໃຈ ກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ, ການປ້ອງກັນຊາດ - ປ້ອງກັນ ຄວາມສະຫງົບ ແລະ ການຕ່າງປະເທດ, ເປັນໃບໜ້າລວມຂອງປະເທດຊາດ ແລະ ລະບອບ ໃໝ່. ດ້ວຍເຫດນັ້ນ, ພັກປະຊາຊົນປະຕິວັດລາວ ຈຶ່ງໄດ້ສຸມໃສ່ນຳພາປັບປຸງ - ກໍ່ສ້າງນະຄອນ ຫລວງວຽງຈັນ ໃຫ້ກາຍເປັນຕົວແບບ ແລະ ເປັນສູນກາງເຕົ້າໂຮມແຫ່ງຄວາມສາມັກຄີປອງດອງ ຂອງປະຊາຊົນບັນດາເຜົ່າ, ທັງນຳພາປົກປັກຮັກສາໝາກຜົນຂອງການປະຕິວັດ, ເຂົ້າຮ່ວມຂະ ບວນການປ້ອງກັນຊາດ - ປ້ອງກັນຄວາມ ສະຫງົບ, ຕັ້ງໜ້າຟື້ນຟູ, ເສດຖະກິດ, ວັດທະນະທຳ - ສັງຄົມ, ປັບປຸງຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນຊາວນະຄອນຫລວງວຽງ ຈັນ ໃຫ້ເປັນປົກກະຕິ ແລະ ດີຂຶ້ນເທື່ອລະກ້າວ. ໂດຍສືບຕໍ່ກໍ່ສ້າງ ນະຄອນຫລວງວຽງຈັນ ໃຫ້ ກາຍເປັນ ນະຄອນຫລວງ ຂອງປະເທດຊາດ ທີ່ໜັກແໜ້ນເຂັ້ມແຂງໃນທຸກດ້ານ. ຄະນະພັກ, ອຳນາດການປົກຄອງ ນະຄອນຫລວງວຽງຈັນ ໄດ້ນຳພາປະຊາຊົນ ຕັ້ງໜ້າເຂົ້າໃນການພັດທະ ນາ ແລະ ປົກປັກຮັກສາ ນະຄອນຫລວງວຽງຈັນ ບົນເສັ້ນທາງສັງຄົມນິຍົມ ມີຜົນສຳເລັດເປັນ ກ້າວໆ.

ມາໃນປີ 1981 ນະຄອນຫລວງວຽງຈັນ ໄດ້ແຍກເຂດປົກຄອງ ອອກເປັນ 2 ຫົວໜ່ວຍ ເທົ່າກັນຄື ນະຄອນຫລວງວຽງຈັນ ແລະ ແຂວງ ວຽງຈັນ.

ນະຄອນຫລວງວຽງຈັນ ໄດ້ຮັບການຂຸດຄົ້ນ ແລະ ນຳໃຊ້ກຳລັງແຮງສັງລວມຢູ່ພາຍໃນ ບວກກັບກຳລັງແຮງຂອງຊາດ ແລະ ສາກົນ ເຂົ້າໃສ່ການພັດທະນາເສດຖະກິດ - ສັງຄົມ, ແກ້ ໄຂຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນນັບມື້ນັບດີຂຶ້ນ; ສະຖຽນລະພາບ ທາງດ້ານການເມືອງ, ຄວາມ ສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ໄດ້ຮັບປະກັນໂດຍພື້ນຖານ; ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ໄດ້ຮັບການປັບປຸງບູ ລະນະນັບມື້ມີຄວາມໜັກແໜ້ນເຂັ້ມແຂງ; ສາຍພົວພັນມິດຕະພາບກັບເພື່ອນມິດໃກ້ໄກ ໄດ້ຮັບ ການເປີດກວ້າງອອກຢ່າງບໍ່ຢຸດຢັ້ງ. ໂດຍສະເພາະ ແມ່ນໃນໄລຍະແຫ່ງການປະຕິບັດແນວທາງ ການປ່ຽນແປງໃໝ່ຮອບດ້ານຢ່າງມີຫລັກການຂອງພັກມານີ້, ເຖິງຈະເປັນໄລຍະເວລາສັ້ນ ກໍ່ ຕາມ ແຕ່ກໍເປັນໄລຍະທີ່ນະຄອນຫລວງວຽງຈັນມີຄວາມຈະເລີນກ້າວໜ້າ ແລະ ໜັກແໜ້ນກວ່າ ໝູ່ທຽບໃສ່ໄລຍະປະຫວັດສາດ ຜ່ານມາ.

ເມື່ອຫວນຄືນ ປະຫວັດສາດຄວາມເປັນມາ ຂອງນະຄອນຫລວງວຽງຈັນ, ປະຊາຊົນລາວ ກໍ່ຄືຊາວນະຄອນຫລວງວຽງຈັນ ສຸດທີ່ມີຄວາມເອກອ້າງທະນົງໃຈເປັນຢ່າງຍິ່ງ ທີ່ເຫັນວ່າພາຍໃຕ້ການນຳພາຂອງບັນພະບູລຸດ, ວິລະກະສັດຜູ້ຮັກຊາດໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວ ໃນໄລຍະໃໝ່ ສ້າງໄດ້ບັນດາຜົນງານມູນເຊື້ອ ແຫ່ງການຕໍ່ສູ້ຢ່າງພິລະອາດຫານ, ທໍລະຫົດອົດທົນ ເພື່ອການຄ້ຳຕົວ ແລະ ການຂະຫຍາຍຕົວຂອງຊາດ, ສ້າງໄດ້ມູນເຊື້ອດຸໝັ່ນຂະຫຍັນພຽນ, ປະດິດສ້າງໃນການອອກແຮງງານ ເພື່ອພັດທະນາສ້າງສາປະເທດຊາດ ຊຶ່ງມັນໄດ້ກາຍເປັນມູນມໍລະດົກ ແລະ ວັດທະນະທຳອັນລ້ຳຄ່າຂອງຊາວນະຄອນຫລວງວຽງຈັນ ກໍຄືທົ່ວທັງຊາດ ໄດ້ສືບທອດຈາກຮຸ່ນນີ້ໄປສູ່ຮຸ່ນໜ້າ ໂດຍສະແດງອອກຢ່າງຈະແຈ້ງສັງລວມດັ່ງນີ້:

1. ຊາວນະຄອນຫລວງວຽງຈັນ ເປັນຜູ້ໂອບອ້ອມໄປດ້ວຍນ້ຳໃຈຮັກເຊື້ອແພ່ງຊາດ, ອົງອາດກ້າແກ່ນເດັດດ່ຽວໝ່ວແໜ້ນ ແລະ ຕໍ່ສູ້ບໍ່ຍອມຈຳນົນກັບສັດຕູ.

2. ຊາວນະຄອນຫຼວງວຽງຈັນ ຍາມໃດກໍ່ມີຄວາມມັກຄີຮັກຫອມຕ່ອມຕຸ້ມ, ເປັນຈິດໜຶ່ງໃຈດຽວ, ເປັນຜູ້ສະຫງວນມັກຕໍ່ການອອກແຮງງານ, ມີຄວາມດຸໝັ່ນຂະຫຍັນພຽນ ແລະ ປະດິດສ້າງໃນການພັດທະນາສ້າງສາບ້ານເມືອງຂອງຕົນ.

3. ຊາວນະຄອນຫລວງວຽງຈັນ ຍາມໃດກໍ່ມັກແຕ່ສັນຕິພາບ, ເອກະລາດ, ອິດສະຫລະພາບ, ເປັນເຈົ້າຕົນເອງ, ມີຄວາມເອື້ອເຟື້ອເພື່ອແຜ່, ມີມາລະຍາດອ່ອນໂຍນ, ຍາມໃດກໍ່ສະແດງໃຫ້ເຫັນເຖິງການເປັນຕົວແທນ ດ້ານວັດທະນະທຳຂອງຄົນລາວທັງຊາດ, ມີໄມຕີຈິດມິດຕະພາບກັບບັນດານະຄອນປະເທດເພື່ອນມິດ ຢູ່ໃກ້ຢູ່ໄກຢ່າງສະເໝີຕົ້ນສະເໝີປາຍ.

ໃນແຕ່ລະໄລຍະຂອງປະຫວັດສາດ, ຊາວນະຄອນຫລວງວຽງຈັນ, ເລີ່ມຈາກການກໍ່ຮ່າງສ້າງຕົວເທື່ອລະເລັກລະໜ້ອຍຈົນກາຍມາເປັນ “ ***ນະຄອນຫລວງຂອງປະເທດຊາດ*** ” ຢ່າງສົມບູນ. ມາໃນປະຈຸບັນນີ້ ການເສີມຂະຫຍາຍມູນເຊື້ອສາມັກຄີປອງດອງຊາດທົ່ວປວງຊົນ, ນ້ຳໃຈເດັດດ່ຽວຕໍ່ສູ້ພິລະອາດຫານ, ທົນທານໝັ້ນໝຽ ແລະ ດຸໝັ່ນຂະຫຍັນພຽນ ໄດ້ກາຍເປັນກຳລັງແຮງສັງລວມເຂົ້າໃນພາລະກິດກໍ່ສ້າງລະບອບໃໝ່ ພາຍໃຕ້ມານະຈິດປ່ຽນແປງໃໝ່ ກໍ່ຄືການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອສ້າງນະຄອນຫລວງວຽງຈັນ ໃຫ້ກາຍເປັນສູນກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດຂອງຊາດຢ່າງແທ້ຈິງ.

ຜ່ານໄລຍະ 30 ກວ່າປີ ແຫ່ງການຕໍ່ສູ້ຍືດເຍື້ອຍາວນານເຕັມໄປດ້ວຍການເສຍສະຫລະອັນໃຫຍ່ຫລວງ ຕ້ານກັບຈັກພັດຜູ້ຮຸກຮານ ແລະ ລູກແຫ່ງຕົນມີທີ່ມີກຳລັງພາຫະນະເຂັ້ມແຂງກວ່າຕັ້ງຫລາຍເທົ່າ ແຕ່ກໍ່ບໍ່ສາມາດທຳລາຍນ້ຳໃຈຮັກຊາດອັນສູງສົ່ງ ຂອງຊາວນະຄອນຫລວງ

ວຽງຈັນໄດ້. ໂດຍພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ໂດຍກົງຄະນະພັກນະຄອນຫລວງວຽງຈັນ ຍິ່ງຕໍ່ສູ້, ຍິ່ງເຕີບໃຫຍ່ຂະຫຍາຍຕົວ ແລະ ຍາດໄດ້ໄຊຊະນະຢ່າງຕໍ່ເນື່ອງ ພົ້ນເດັ່ນໄລຍະນີ້ ແມ່ນຂະບວນການຕໍ່ສູ້ພາຍໃຕ້ການນຳພາຂອງນາຍຄູຄຳ, ຂະບວນການກຳມະກອນ ໂຮງງານ ກາຟຟາ; ຂະບວນການຕໍ່ສູ້ໃຕ້ການນຳພາຂອງຄະນະພັກ ແຂວງ ວຽງຈັນ ປີ 1947 - 1950, ຂະບວນການຕໍ່ສູ້ ທີ່ມີການປະສານສົມທົບປ້ອງກັນຕົວເມືອງວຽງຈັນ ປີ 1960; ຂະບວນການລຸກຮື້ຂຶ້ນຢຶດອຳນາດການປົກຄອງ 23 ສິງຫາ ແລະ ປະກາດເອກະລາດ 12/10/ 1945; ຂະບວນການຕໍ່ສູ້ລຸກຂຶ້ນຢຶດອຳນາດ 23 ສິງຫາ ແລະ ສະຖາປານາປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 2/12/ 1975 ຊຶ່ງແມ່ນໄລຍະເສັ້ນທາງທີ່ສະຫວ່າງສະໄຫວ, ເປັນຂີດໝາຍປະຫວັດສາດ ອາວະສານແຫ່ງການຕໍ່ສູ້ ຕ້ານກັບສັດຕູຜູ້ຮຸກຮານ ແລະ ລູກແຫ່ງຕົ້ນມື ກໍ່ຄື ສຳເລັດການປະຕິວັດປົດປ່ອຍຊາດ, ກ້າວສູ່ສັງກາດໃໝ່ແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງຊາວນະຄອນຫລວງວຽງຈັນ. ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ປະຊາຊົນ ນະຄອນຫລວງວຽງຈັນ ພາຍໃຕ້ການນຳພາຂອງອົງຄະນະພັກ, ອຳນາດການປົກຄອງນະຄອນຫລວງວຽງຈັນ ໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ ແລະ ເອກະພາບແຫ່ງຊາດ. ສືບຕໍ່ດຳເນີນການກໍ່ສ້າງ ນະ ຄອນຫລວງວຽງຈັນ ໃຫ້ກາຍເປັນນະຄອນຫລວງແຫ່ງຊາດທີ່ມີສະເໜ່, ສີວິໄລຢ່າງຍືນຍົງ.

ບັນດາໝາກຜົນກໍ່ຄືໄຊຊະນະ ທີ່ບັນລຸໄດ້ໃນໄລຍະຜ່ານມານັ້ນ ແມ່ນມາຈາກຫລາຍປັດໄຈແຕ່ສາຍເຫດຕົ້ນຕໍ ແມ່ນຍ້ອນ:

ໜຶ່ງ: ຍ້ອນນ້ຳໃຈຮັກຊາດ, ກຳລັງແຮງມະຫາສາມັກຄີຂອງປະຊາຊົນ ນະຄອນຫລວງວຽງຈັນ ເຄີຍມີນ້ຳໃຈຮັກຫອມສັນຕິພາບຕັ້ງແຕ່ດຶກດຳບັນ, ຄຽດຊັງສົງຄາມ. ໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວໂດຍກົງອົງຄະນະພັກນະຄອນຫລວງວຽງຈັນ, ປະຊາຊົນໄດ້ມີຄວາມສາມັກຄີກັນ, ບໍ່ຈຳແນກເຜົ່າຊົນ, ທັງໝົດລ້ວນແຕ່ໄດ້ຄຽງຂ້າງກັນຕໍ່ສູ້ຢ່າງພິລະອາດຫານ, ເດັດດ່ຽວຕໍ່ສູ້ເພື່ອປະເທດຊາດ ເພື່ອປົກປັກຮັກສານະຄອນຫລວງແຫ່ງຊາດ.

ສອງ: ຍ້ອນໄດ້ຮັບການຊີ້ນຳ - ນຳພາ ໃກ້ຊິດຕິດແທດ ຈາກສູນກາງພັກປະຊາຊົນປະຕິວັດລາວ. ຄະນະພັກນະຄອນຫລວງວຽງຈັນ ໄດ້ນຳພາຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ເຂົ້າໃນສະພາບການ ແລະ ເງື່ອນໄຂຕົວຈິງຂອງພື້ນທີ່ຢ່າງປະດິດສ້າງຖືກຕ້ອງ, ມີໄຫວພິບ, ບັນດາຄະນະພັກທ້ອງຖິ່ນແຕ່ລະຂັ້ນໄດ້ວາງນະໂຍບາຍ, ໜ້າທີ່ ແລະ ມາດຕະການຈັດຕັ້ງປະຕິບັດສອດຄ່ອງຖືກແທດກັບສະພາບຕົວຈິງ, ມີປະສິດທິຜົນ.

ຢູ່ໃນໄລຍະຕໍ່ສູ້ ຕ້ານລ່າເມືອງຂຶ້ນຝຣັ່ງ ເຖິງວ່າ ບັນດາການຈັດຕັ້ງຣາກຖານພັກ, ຣາກຖານການເມືອງ, ການທະຫານ, ມະຫາຊົນຢູ່ຂັ້ນຕ່າງໆ ຫາກໍ່ໄດ້ຂຸດຄົ້ນສ້າງຕັ້ງ, ປັບປຸງຂະຫຍາຍຕົວ ແຕ່ກໍ່ໄດ້ພົບຄວາມຫຍຸ້ງຍາກຫລາຍດ້ານ, ຖືກສັດຕູປິດລ້ອມໝີບຮົດ, ແຕ່ຍ້ອນວ່າ ໄດ້ມີການຊີ້ນຳຂອງ ຄະນະພັກ ແຄ້ວນລາວ (ພັກຄອມມູນິດອິນດູຈີນ) ນັບແຕ່ມື້ທຳອິດ ກໍ່ໄດ້ສ້າງບົດບາດນຳພາສຳຄັນສົມຄວນ ແລະ ຮອບດ້ານຕໍ່ກັບກຳລັງປະກອບອາວຸດ, ກຳລັງການເມືອງ, ຣາກຖານປະຊາຊົນ, ສ້າງໄດ້ກອງກຳລັງປະກອບອາວຸດທີ່ໜຸ່ມນ້ອຍ ເປັນຫລັກແຫລ່ງ ໃຫ້ແກ່ການຕໍ່ສູ້ ການທະຫານ ຕ້ານຄືນພວກຮຸກຮານ.

ສາມ: ຄະນະພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ນະຄອນຫລວງວຽງຈັນ ມີຄວາມສາມັກຄີ ເປັນຈິດໜຶ່ງໃຈດຽວກັນ, ຮັບເອົາທຸກຄວາມຫຍຸ້ງຍາກລຳບາກ, ເສຍສະຫລະເພື່ອຕໍ່ສູ້ຕ້ານລ່າເມືອງຂຶ້ນຝລັ່ງ ແລະ ຈັກກະພັດອາເມລິກາ, ປົດປ່ອຍເອົາບ້ານເກີດເມືອງນອນຍາດເອົາເອກະລາດມາໃຫ້ປະເທດຊາດ.

ສີ່: ຄະນະພັກ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ຊີ້ນຳ - ນຳພາກຳລັງປະກອບອາວຸດ ແລະ ປະຊົນຊົນແນວຫລັງກັບທີ່, ພິເສດແມ່ນໄດ້ກໍ່ສ້າງເຂດລ້ອງຕອນ - ເມືອງ ເຟືອງ ໃຫ້ເປັນທີ່ໝັ້ນແຂງແກ່ນ, ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວຕີສັດຕູ, ພ້ອມກັນນັ້ນ ໄດ້ຈັດຕັ້ງຮັບເອົາການຊ່ວຍເຫລືອດ້ານກຳລັງຄົນ ແລະ ຊັບສົມຂອງປະຊາຊົນ ແລະ ກຳລັງປະກອບ ອາວຸດຂອງເພື່ອນມິດຢ່າງສຸດໃຈ ດ້ວຍຄວາມຜູກພັນອັນດູດດື່ມ ແລະ ແໜ້ນແຟ້ນ.

ຕະຫລອດໄລຍະ ປະຫວັດສາດ ອັນຍາວນານຜ່ານຮ້ອນ, ຜ່ານໜາວອັນແສນຫຍຸ້ງຍາກລຳບາກ ຊຶ່ງມີທັງຂະບວນການຕໍ່ສູ້ປະຕິວັດຕ້ານກັບສັດຕູຜູ້ຮຸກຮານ, ກອບກູ້ເອົາຄວາມເປັນເອກະລາດ, ອິດສະຫລະພາບມາໃຫ້ປະເທດຊາດ ແລະ ປະຊາຊົນ, ມີທັງຂະບວນການຕໍ່ສູ້ຕ້ານກັບໄພທຳມະຊາດ ເພື່ອການຄົງຕົວ ແລະ ຂະຫຍາຍຕົວຂອງຕົນມານານກວ່າ 450 ປີ. (1560 - 2010) ນັ້ນ. ພາຍໃຕ້ການນຳພາຂອງບັນພະບູລຸດ, ວິລະກະສັດຜູ້ຮັກຊາດ ໃນແຕ່ລະຍຸກ ແຕ່ລະສະໄໝ ໃນເມື່ອກ່ອນ. ພາຍໃຕ້ການນຳຂອງພັກປະຊາຊົນລາວ (ພັກປະຊາຊົນ ປະຕິວັດລາວປະຈຸບັນ) ຊາວນະຄອນຫລວງວຽງຈັນ ນັບທັງຜູ້ຊົງຄຸນນະວຸດທິ, ນັກຮຽນຮູ້ປັນຍາຊົນຊາວໜຸ່ມ, ນັກສຶກສາ, ກຳມະກອນ ແລະ ປະຊາຊົນບັນດາເຜົ່າ ໄດ້ປະກອບສ່ວນອັນໃຫຍ່ຫລວງເຂົ້າໃນພາລະກິດກອບກູ້ເອົາເອກະລາດ ມາໃຫ້ປະເທດຊາດ ດ້ວຍຄວາມເສຍສະຫລະອັນສູງສົ່ງ ເປັນຈຳນວນຫລາຍຮ້ອຍ, ຫລາຍພັນຄົນ. ຫລາຍຄົນໄດ້ກາຍເປັນນັກຮົບແຂ່ງຂັນ ແລະວິລະຊົນແຫ່ງຊາດຢ່າງສົມກຽດ. ປະເທດຊາດກໍ່ຄືພັກ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຈົດຈຳລຳລຶກຜົນງານ, ຄຸນງາມຄວາມດີຂອງຊາວນະຄອນຫລວງວຽງຈັນ ໄວ້ໃນໜ້າປຶ້ມຄຳ ປະຫວັດສາດ ຕະຫລອດກາລະນານ.

✸ ເຫດການທີ່ສຳຄັນທາງປະຫວັດສາດ ຢູ່ນະຄອນຫລວງວຽງຈັນ.

- ພສ 236 ກ່ອນ ຄສ 307 ປີ ທ້າວ ບູລີຈັນ ເປັນຜູ້ສ້າງຕັ້ງເມືອງວຽງຈັນ ຊຶ່ງເອີ້ນວ່າ: ເມືອງ " ຈັນທະບູລີ " . ແລະ ມີຊື່ວ່າ ພະຍາ ຈັນທະບູລີ ປະສິດທິສັກ ເປັນຜູ້ປົກຄອງ.

- ປີ 1717 ຄະນະທູດຈາກ ອັນຕັນ (ວຽງຈັນ " ໜອງຄັນແທ້ເສື້ອນ້ຳ ") ຊຶ່ງເປັນ ນະຄອນຫລວງ ຂອງອານາຈັກສີໂຄດຕະບອງ ນຳໂດຍ ພູມີ ໄປຈະເລີນສຳພັນທະໄມຕີກັບຈີນ ໃນຣາຊະວົງຖັງ. ຈາກນັ້ນໃນແຕ່ລະປີຄື. ໃນປີ 750, 753, 771, 779. ກໍ່ມີຄະນະທູດ ຈາກອັນຕັນ (ວຽງຈັນ) ຖືກສົ່ງໄປຈະເລີນສຳພັນທະໄມຕີກັບຈີນ ຢ່າງຕໍ່ເນື່ອງ.

- ປີ 1357 ເຈົ້າຟ້າງຸ່ມ ມະຫາລາດ ໄດ້ຈັດຕັ້ງສະຫລອງໄຊໃຫຍ່ ພິນສຳເລັດການທ້ອນໂຮມອານາຈັກລາວລ້ານຊ້າງ 7 ມື້ 7 ຄືນ ຢູ່ວຽງຈັນ.

- ປີ 1560: ເຈົ້າ ໄຊຍະເຊດຖາທິລາດ ຍ້າຍນະຄອນຫລວງ ອານາຈັກລາວລ້ານຊ້າງ ຈາກຫລວງພະບາງ ມາຕັ້ງຢູ່ວຽງຈັນ.

- ປີ 1563 -1565: ພະມ້າ ເຂົ້າມາຮຸກຮານ ວຽງຈັນ ຄັ້ງທີໜຶ່ງ.

- ປີ 1566: ປະຕິສັງຂອນ ພະຫາດຫລວງວຽງຈັນ ສຳເລັດ.

- ປີ 1569 - 1570: ພະມ້າ ເຂົ້າມາຮຸກຮານວຽງຈັນ ຄັ້ງທີສອງ.

- ປີ 1572: ເຈົ້າ ໄຊຍະເຊດຖາທິລາດ ສົ່ນພະຊົນ ຢູ່ພາກໃຕ້ລາວ ແລະ ພະຍາ ແສນສຸລິນ ສືບທອດບັນລັງທີ່ ນະຄອນຫລວງວຽງຈັນ.

- ປີ 1574 : ພະມ້າ ເຂົ້າມາຮຸກຮານວຽງຈັນ ຄັ້ງທີສາມ ແລະ ກໍ່ຕົກເປັນຫົວເມືອງສ່ວຍໃຫ້ ແກ່ພະມ້າ ເປັນເວລານານ ເຖິງ 24 ປີ.

- ປີ 1599: ພະວໍລະວົງສາ ປະກາດເອກະລາດຈາກພະມ້າ ແລ້ວຍົກກອງທັບ ນຳໂດຍ ພະຍາ ແສນຫລວງ ເຂົ້າຍຶດລ້ານນາ.

- ປີ 1621 - 1683: ໄລຍະຕໍ່ສູ້ຍາດຊີງອຳນາດ ຂອງກະສັດລາວ ລະຫວ່າງກຸ່ມຕ່າງໆ.

- ປີ 1638 - 1695: ເຈົ້າ ສຸລິຍະວົງສາທຳມິກະລາດ ຂຶ້ນຄອງລາຊະສົມບັດ ທີ່ນະຄອນຫລວງວຽງຈັນ ແລະ ນຳພາອານາຈັກລ້ານຊ້າງ ມີຄວາມຈະເລີນຮຸ່ງເຮືອງ.

- ປີ 1641 -1642: ເກີຣິດວັນວຸສະໂຕບ ຜູ້ແທນ ບໍລິ ສັດອິນເດຍ ຕາເວັນອອກ ຂອງດັສ ມາຢ້ຽມຢາມ ນະຄອນຫລວງວຽງຈັນ.

- ປີ 1695 : ພະຍາ ເມືອງຈັນ ຂຶ້ນກຳອຳນາດແທນ ເຈົ້າ ສຸລິຍະວົງສາ ທຳມິກະລາດ.

- ປີ 1698 - 1730: ພະໄຊອົງເວ້ ຂຶ້ນຄອງບັນລັງ ແລະ ໄດ້ຮັບນາມມະຍົດເປັນ ພະຍາ ໄຊຍະເຊດຖາທິລາດ ທີສອງ.

- ປີ 1707 : ກົງ ກິດສະລາດ ແຍກ ຫລວງພະບາງ ອອກຈາກວຽງຈັນ.

- ປີ 1713 : ສ້ອຍ ສີສະໜຸດ ແຍກ ຈຳປາສັກ ອອກຈາກວຽງຈັນ.

- ປີ 1778 - 1779 : ຕາກສິນ ເຈົ້າຊີວິດຂອງສະຫຍາມ ສັ່ງກອງທັບເຂົ້າຮຸກຮານ ແລະ ຢຶດຄອງ ອານາຈັກລ້ານຊ້າງວຽງຈັນ, ຈຳປາສັກ ແລະ ຫລວງພະບາງ.

- ປີ 1795: ເຈົ້າ ນັນທະເສນ ທີ່ຈັບລົງໄປບາງກອກ ແລະ ເຈົ້າ ອິນທະວົງ ຖືກແຕ່ງຕັ້ງ ໃຫ້ມາປົກຄອງ ເມືອງວຽງຈັນ.

- ປີ 1804 : ເຈົ້າ ອະນຸວົງ ໄດ້ຂຶ້ນຄອງບັນລັງຢູ່ວຽງຈັນ.

- ປີ 1826 - 1829: ສົງຄາມຕໍ່ສູ້ ເພື່ອກອບກູ້ເອກະລາດ ຂອງປະຊາຊົນລາວ ນຳໂດຍ ເຈົ້າ ອະນຸວົງ ເຈົ້າຊີວິດອານາຈັກລ້ານຊ້າງວຽງຈັນ.

- ປີ 1893 : ຝຣັ່ງ ແລະ ສະຫຍາມ ເຊັນສັນຍາຕັດແບ່ງແຜ່ນດິນ ປະເທດລາວ.

- ປີ 1920 : ຂະບວນການຕໍ່ສູ້ຕ້ານຝຣັ່ງ ພາຍໃຕ້ການນຳພາຂອງນາຍຄູຄຳ ຢູ່ວຽງຈັນ.

- ປີ 1934 - 1935: ຂະບວນການປະທ້ວງ ຂອງມວນຊົນ ຢູ່ວຽງຈັນ ແລະ (ຢູ່ທ່າແຂກ, ປາກເຊ).

- ປີ 1937 : ຂະບວນການນັດຢຸດງານ 4 ມື້ຕໍ່ເນື່ອງ ຂອງກຳມະກອນໄຟຟ້າ ວຽງຈັນ.

- ວັນທີ 28 ສິງຫາ 1941: ການເຈລະຈາລະຫວ່າງ ອຳນາດການປົກຄອງຝຣັ່ງ ແລະ ເຈົ້າຊີວິດ ຫລວງພະບາງ ໃຫ້ເອົາວຽງຈັນ ຂຶ້ນກັບອານາຈັກຫລວງພະບາງ.

- ປີ 1945: ຂະບວນກຳມະກອນໂຮງງານຕຳແຜ່ນກາຟຟາ 500 ຄົນ ຢູ່ວຽງຈັນ ປະທ້ວງ ການຢຸດຈ່າຍເງິນເດືອນຂອງຍີ່ປຸ່ນ ແລະ ມອບໂຮງງານໃຫ້ຄົນລາວ ກ່ອນພວກເຂົາຖອນໜີ.

- ວັນທີ 23 ສິງຫາ 1945: ຊາວນະຄອນຫລວງວຽງຈັນ ໝື່ນກວ່າຄົນລຸກຮື້ຂຶ້ນຢຶດອຳ ນາດຂັບໄລ່ ຍີ່ປຸ່ນ ທີ່ເຂົ້າມາຄອບຄອງລາວ ແທນພວກຈັກກະພັດຝຣັ່ງ.

- ວັນທີ 12 ຕຸລາ 1945: ຊາວນະຄອນຫລວງວຽງຈັນ 2 ໝື່ນກວ່າຄົນ ນັດໂຮມຊຸມນຸມ ຢູ່ສະໜາມກີລາ ປະກາດເອກະລາດຕໍ່ໂລກ.

- ວັນທີ 24 - 26 ມີນາ 1946: ກຳລັງທະຫານຝຣັ່ງ ບຸກໂຈມຕີຢຶດເອົາຕົວເມືອງວຽງຈັນ.

- ວັນທີ 28 ກໍລະກົດ 1959: ລັດຖະບານວຽງຈັນ ຈັບກຸມຜູ້ນຳແນວລາວຮັກຊາດ ຈຳ ນວນ 16 ທ່ານ ເຂົ້າຂັງຄຸກ ຢູ່ໂພນເຄັງ.

- ຄືນວັນທີ 23 - 24 ພຶດສະພາ 1960: ຜູ້ນຳແນວລາວຮັກຊາດ ແຫກຄຸກ ໂພນເຄັງ ວຽງຈັນ ກັບຄືນສູ່ທີ່ໝັ້ນດ້ວຍຄວາມປອດໄພ.

- ວັນທີ 9 ສິງຫາ 1960 : ກຳລັງຂອງກອງແລ ເຮັດລັດຖະປະຫານຢູ່ວຽງຈັນ.

- ວັນທີ 20 - 28 ພະຈິກ 1960 : ກຸ່ມສະຫວັນນະເຂດ ເລີ່ມໃຊ້ນຳກຳລັງບຸກຕີເຂົ້າ ວຽງຈັນ.

- ວັນທີ 13 - 18 ສິງຫາ 1960 : ການຕໍ່ສູ້ປ້ອງກັນຕົວເມືອງວຽງຈັນ ຂອງກຳລັງລັດຖະບານ ທີ່ຖືກຕ້ອງຕາມກົດໝາຍ.

- ວັນທີ 1 ເມສາ 1963: ຄາດຕະກຳ ທ່ານ ກິນິມ ພົນເສນາ ລັດຖະມົນຕີກະຊວງການຕ່າງປະເທດ, ປະທານພັກສັນຕິພາບເປັນກາງກ້າວໜ້າ, ເກີດມີຄວາມວຸ້ນວາຍຢູ່ວຽງຈັນ.

- ເມສາ ປີ 1963 : ບັນດາລັດຖະມົນຕີ ຂອງຝ່າຍແນວລາວຮັກຊາດ ແລະ ກຳລັງເປັນກາງອອກຈາກວຽງຈັນ.

- ວັນທີ 19 ເມສາ 1964: ກຸປະສິດອະໄພ ນຳພາເຮັດລັດຖະປະຫານຢຶດອຳນາດລັດຖະບານ ສຸວັນນະພູມມາ ຢູ່ວຽງຈັນ.

- ວັນທີ 31 ມັງກອນ 1965: ການພະຍາຍາມເຮັດລັດຖະປະຫານ ລະຫວ່າງກຸ່ມ ພູມີ ໜໍ່ສະຫວັນ ແລະ ສີໂຫ ກັບກຸ່ມ ກຸປະສິດອະໄພ ຢູ່ວຽງຈັນ.

- ວັນທີ 21 ຕຸລາ 1966: ນາຍພົນ ທ້າວ ມາ ເຮັດລັດຖະປະຫານຢູ່ວຽງຈັນ.

- ວັນທີ 23 ພະຈິກ 1966: ກຳລັງເປັນກາງນິຍົມຝ່າຍຂວາເຂົ້າຮ່ວມກອງທັບຫຸ່ນວຽງຈັນ.

- ວັນທີ14 ຕຸລາ 1972: ຜູ້ແທນແນວລາວຮັກຊາດເຂົ້າວຽງຈັນ ເພື່ອເຈລະຈາຟື້ນຟູສັນຕິພາບ.

- ວັນທີ 21 ກຸມພາ 1973 : ເຊັນສັນຍາວຽງຈັນ.

- ວັນທີ 20 ສິງຫາ1973 : ກຸ່ມ ພູມີ ໜໍ່ສະຫວັນ, ນາຍພົນ ທ້າວມາ, ປານີ, ບຸນເລີດ, ໄຊໂກສີ ເຮັດລັດຖະປະຫານຢູ່ວຽງຈັນ ແຕ່ບໍ່ສຳເລັດ.

- ວັນທີ 14 ກັນຍາ 1973 : ເຊັນອະນຸສັນຍາວຽງຈັນ.

- ຕຸລາ 1973: ກຳລັງກອງທັບປົດປ່ອຍປະຊາຊົນລາວເຂົ້າປະສົມຢູ່ວຽງຈັນ ແລະ ຫລວງພະບາງ.

- ວັນທີ 5 ເມສາ 1974 :ສ້າງຕັ້ງລັດຖະບານປະສົມຊົ່ວຄາວ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດຢູ່ວຽງຈັນ.

- ວັນທີ 14 ຕຸລາ 1974 : ກຳມະກອນໄຟຟ້າລາວ ວຽງຈັນ ລຸກຮື້ຂຶ້ນປະທ້ວງຢຶດອຳນາດ.

- ວັນທີ 1 ພຶດສະພາ 1975 : ການໂຮມຊຸມນຸມໃຫຍ່ເທື່ອທຳອິດ ຂອງຊາວນະຄອນຫລວງວຽງຈັນ.

- ວັນທີ 9 ພຶດສະພາ 1975: ການໂຮມຊຸມນຸມ ສະແດງກຳລັງຂອງຊາວວຽງຈັນ ຂັບໄລ່ບັນດາລັດຖະມົນປະຕິການ ອອກຈາກລັດຖະບານປະສົມ.

- ວັນທີ 23 ສິງຫາ 1975 : ວັນຢຶດອຳນາດຢູ່ວຽງຈັນ.

- ວັນທີ 15 ມິຖຸນາ1976 : ປ່ຽນເງິນ ວຽງຈັນ ມາໃຊ້ເງິນກີບປົດປ່ອຍ.

- ວັນທີ 11 ເມສາ 1977: ເວລາ 5 ໂມງເຊົ້າ ກຳລັງປະກອບອາວຸດ ນະຄອນຫລວງວຽງຈັນ ບຸກໂຈມຕີຍຶດເອົາ ດອນຊີງຊູ້ ຄືນຈາກພວກປະຕິກາມພັດຖິ່ນ.

- ວັນທີ 22 - 29 ກັນຍາ 1979: ກອງປະຊຸມການທະຫານທ້ອງຖິ່ນ ທົ່ວປະເທດ ຈັດຂຶ້ນຢູ່ນະຄອນຫລວງວຽງຈັນ.

- ວັນທີ 5 ເມສາ 1979: ກອງປະຊຸມໃຫຍ່ວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນທົ່ວປະເທດ ໄດ້ເປີດຂຶ້ນຢູ່ນະຄອນຫລວງວຽງຈັນ.

- ວັນທີ 27 - 30 ເມສາ 1982: ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກປະຊາຊົນ ປະຕິວັດລາວ ຢູ່ທີ່ນະຄອນຫລວງວຽງຈັນ.

- ປີ 1985: ຈັດງານສວນສະໜາມ ສະເຫລີມສະຫລອງ ວັນຊາດ ຄົບຮອບ 10 ປີ ທີ່ ນະຄອນຫລວງວຽງຈັນ.

- ວັນທີ 13 - 15 ພະຈິກ 1986: ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນ ປະຕິວັດ ລາວ ທີ່ນະຄອນຫລວງວຽງຈັນ.

- ວັນທີ 13 ມິນາ 1988: ປະຊາຊົນ ນະຄອນຫລວງວຽງຈັນ 2 ໝື່ນກວ່າຄົນ ເຂົ້າຮ່ວມ ພິທີສະຫລອງ " ໄຊຊະນະບັນຮົບບໍ່ແຕນ ".

- ວັນທີ 27 - 29 ມິນາ 1991: ກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກປະຊາຊົນ ປະຕິວັດ ລາວ ທີ່ນະຄອນຫລວງວຽງຈັນ.

- ວັນທີ 18 - 20 ມິນາ 1996: ກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນ ປະຕິວັດ ລາວ ທີ່ນະຄອນຫລວງວຽງຈັນ.

- ວັນທີ 23 ກໍລະກົດ 1997: ລາວເຂົ້າເປັນສະມາຊິກ ປະຊາຄົມອາຊີຕາເວັນອອກສ່ຽງໃຕ້ (ASEAN).

- ວັນທີ 12 -14 ມິນາ 2001: ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກປະຊາຊົນ ປະຕິວັດ ລາວ ທີ່ນະຄອນຫລວງວຽງຈັນ.

- ວັນທີ 29 - 30 ພະຈິກ 2004: ລາວເຮົາເປັນເຈົ້າພາບ ຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 ຢູ່ນະຄອນຫລວງວຽງຈັນ.

- ວັນທີ 18 - 23 ກັນຍາ 2005: ຈັດກອງປະຊຸມໄອໂປ (AIPO) ຄັ້ງທີ 26 ທີ່ນະຄອນຫລວງວຽງຈັນ.

- ວັນທີ 18 - 21 ມິນາ 2006: ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກປະຊາຊົນ ປະຕິວັດ ລາວ ທີ່ນະຄອນຫລວງວຽງຈັນ.

- ວັນທີ 9 - 18 ທັນວາ 2009: ລາວເປັນເຈົ້າພາບ ຈັດງານມະຫາກຳກິລາຊີເກມ ຄັ້ງທີ 25 ທີ່ນະຄອນຫລວງວຽງຈັນ.

✸ ລາຊະວົງຕ່າງໆ ທີ່ປົກຄອງຢູ່ວຽງຈັນ.

ກ. ລຳດັບກະສັດທີ່ປົກຄອງອານາຈັກລາວລ້ານຊ້າງວຽງຈັນ.

1. ເຈົ້າ ໄຊຍະເຊດຖາທິລາດ 1548 -1571 ລູກເຈົ້າໂພທິສາລະລາດ.
2. ພະຍາ ແສນສຸຣິນ 1571 -1575 ເປັນສາມັນຊົນ ບ້ານ ໜອງຄາຍ.
3. ພະມະຫາ ອຸປະລາດ ວໍຣະວົງໂສ 1575 - 1580 ລູກຂອງເຈົ້າ ໄຊຍະເຊດຖາທິລາດ.
4. ພະຍາ ແສນສຸຣິນ 1580 - 1582 ຂຶ້ນສູ່ອຳນາດ ຄັ້ງທີສອງ.
5. ພະຍາ ນະຄອນນ້ອຍ 1582 - 1583 ລູກຂອງ ພະຍາ ແສນສຸຣິນ.
6. ພະໜໍ່ເມືອງ 1591-1596 ລູກຂອງເຈົ້າ ໄຊຍະເຊດຖາທິລາດ.
7. ພະວໍລະປົຕາ 1596 - 1622 ລູກຂອງນາງ ຄຳໄຄ້ ນ້ອງສາວຂອງ ເຈົ້າ ໄຊຍະເຊດຖາທິລາດ.
8. ພະວໍຣະວົງສາ 1622 -1623 ລູກຂອງພະວໍຣະປົຕາ.
9. ພະບັນດິດ ໂພທິສານ 1623 - 1627 ລູກຂອງພະຍານະຄອນນ້ອຍ.
10. ພະໜ່ອມແກ້ວ 1627-1633 ລູກຂອງພະວໍຣະວົງສາ.
11. ພະອຸປະເຍົາ (ວິໄຊ) 1633 -1636 ລູກຂອງພະສໍຣະວົງສາ.
12. ເຈົ້າຕ່ອມຄຳ 1636 -1638 ລູກຂອງພະວໍຣະວົງສາ.
13. ພະສຸຣິຍະວົງສາທຳມິກະຣາດ 1638 - 1695 ລູກຂອງພະວໍຣະວົງສາ.
14. ພະຍາ ເມືອງຈັນ 1695 ລູກເຂີຍ ເຈົ້າ ສຸຣິຍະວົງສາ ທຳມິກະລາດ ຄອງລາດ 6 ເດືອນ.
15. ເຈົ້າ ນັນກະຣາດ 1696 - 1698 ລູກຂອງເຈົ້າປຸ.
16. ພະໄຊອົງເວ້ 1698 - 1730 ລູກຂອງ ເຈົ້າ ຊຸມພູ.

ຂ. ກະສັດອານາຈັກລາວລ້ານຊ້າງວຽງຈັນ (ຫລັງຈາກແບ່ງແຍກເປັນ 3 ອານາຈັກ).

1. ພະໄຊອົງເວ້ 1698 - 1730 ລູກຂອງ ເຈົ້າ ຊຸມພູ.
2. ເຈົ້າ ສິຣິບຸນຍະສານ 1730 -1779 ລູກຂອງ ພະໄຊອົງເວ້.
3. ເຈົ້າ ນັນທະເສນ 1779 - 1794 ລູກຂອງ ເຈົ້າ ສິຣິບຸນຍະສານ.
4. ເຈົ້າ ອິນທະວົງ 1794 - 1804 ລູກຂອງ ເຈົ້າ ສິຣິບຸນຍະສານ.
5. ເຈົ້າ ອະນຸວົງ 1804 - 1828 ລູກຂອງ ເຈົ້າ ສິຣິບຸນຍະສານ.

ຄ. ປະທານປົກຄອງ, ເຈົ້າຄອງ ນະຄອນຫລວງວຽງຈັນ ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍສະຖາປານາ ລະບອບໃໝ່ ສປປ ລາວ ແຕ່ປີ 1975 ເປັນຕົ້ນມາ.

- ປີ 1975: ທ່ານ ໝື່ນ ສົມວິຈິດ.
- ປີ 1976 - 1979: ທ່ານ ສີສະຫວາດ ແກ້ວບຸນພັນ.
- ປີ 1981 -1985: 13 ສິງຫາ ທ່ານ ເພົ້າ ພົມມະຈັນ ເປັນເຈົ້າຄອງ.
- ປີ 1986 - 1993: ທ່ານ ສີສະຫວາດ ແກ້ວບຸນພັນ.
- ປີ 1994 - 1999: ທ່ານ ບຸນຍັງ ວໍລະຈິດ.
- ປີ 2000 - 2004: ທ່ານ ບຸນເຮືອງ ດວງພະຈັນ.
- ປີ 2005 - 2008: ທ່ານ ດຣ ສົມລະວິງ ຄຸດໄພທູນ.
- ປີ 2009 - ... : ທ່ານ ສົມບັດ ເຢຍລີເຮີ.

ງ. ນາຍົກລັດຖະມົນຕີຂອງລັດຖະບານ ລາຊະອານາຈັກລາວ ແຕ່ປີ 1945 -1974 ແລະ ລັດຖະບານ ສາທາລະລັດ ປະຊາທິປະໄຕ ປະຊາຊົນລາວ ແຕປີ 1975 - 2010.

★ ນາຍົກລັດຖະມົນຕີ ຂອງລັດຖະບານຫຸ່ນ ວຽງຈັນ ໃນລາຊະອານາຈັກລາວ.

- ພະຍາ ຄຳມ້າວ ວິໄລ: 12 ຕຸລາ 1945 (ລັດຖະບານຊົ່ວຄາວ ຂອງປະເທດລາວ ເອກະລາດ).
- ເຈົ້າ ສຸວັນນະລາດ: 10 ກໍລະກົດ 1947 (ລັດຖະບານ ທີ່ພວກລ່າເມືອງຂຶ້ນຝຣັ່ງ ສ້າງຕັ້ງຂຶ້ນ).
- ເຈົ້າ ບຸນອູ້ມ ນະຈຳປາສັກ: 4 ມັງກອນ 1948.18 ມີນາ 1949.
- ຜຸຍ ຊະນະນິກອນ: 28 ກຸມພາ 1950.
- ສະເດັດເຈົ້າ ສຸພານຸວົງ: 13 ສິງຫາ 1950 (ລັດຖະບານລາວຕໍ່ຕ້ານ).
- ສະເດັດເຈົ້າ ສຸວັນນະພູມມາ 23 ທັນວາ 1951.
  : 8 ພຶດສະພາ 1953 .
- ກະຕ່າຍ ໂດນສະໂສລິດ : 27 ພະຈິກ 1954.
- ສະເດັດເຈົ້າ ສຸວັນນະພູມມາ: 21 ມີນາ 1956.
  : 9 ສິງຫາ 1957.
  : 29 ພະຈິກ 1957 (ລັດຖະບານປະສົມ ເທື່ອທຳອິດ)
- ຜຸຍ ຊະນະນິກອນ : 18 ສິງຫາ 1958.
  : 24 ມັງກອນ 1959.
  : 14 ທັນວາ 1959.

- ກຸອະໄພ : 8 ມັງກອນ 1960.
- ສົມສະໜິດ : 6 ມິນາ 1960.

-ສະເດັດ ເຈົ້າ ສຸວັນນະພູມມາ: 31 ສິງຫາ 1960.

- ເຈົ້າ ບຸນອູ້ມ :14 ທັນວາ1960 (ລັດຖະບານຜິດກົດໝາຍຕັ້ງຢູ່ ສະຫວັນນະເຂດ).
- ເຈົ້າ ບຸນອູ້ມ : 5 ມັງກອນ 1961 (ລັດຖະບານຜິດກົດໝາຍ).
- ສະເດັດ ເຈົ້າ ສຸວັນນະພູມມາ: 23 ມິຖຸນາ 1962 (ລັດຖະບານປະສົມ ເທື່ອທີ 2).
: 22 ພຶດສະພາ 1964.
: 27 ກໍລະກົດ 1964 .
: 11 ມີນາ 1965.
: 9 ກັນຍາ 1965.
: 2 ມິຖຸນາ 1967.
: 5 ເມສາ 1974 (ລັດຖະບານປະສົມເທື່ອທີ 3).

★ ນາຍົກລັດຖະມົນຕີ ຂອງລັດຖະບານ ລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ທ່ານ ໄກສອນ ພົມວິຫານ: 2 ທັນວາ 1975 - 1992.
- ທ່ານ ພົນເອກ ຄຳໄຕ ສີພັນດອນ: 1992 - 1998.
- ທ່ານ ພົນເອກ ສີສະຫວາດ ແກ້ວບຸນພັນ 1998 - 2000.
- ທ່ານ ບຸນຍັງ ວໍລະຈິດ 2000 - 2005.
- ທ່ານ ບົວສອນ ບຸບຜາວັນ 2005 - ...

ບັນດາສະຫາຍ ທີ່ຖືກເລືອກຕັ້ງເປັນເລຂາຄະນະພັກ, ປະທານປົກຄອງ, ເຈົ້າຄອງນະຄອນຫລວງວຽງຈັນ ພາຍຫຼັງຍຶດອຳນາດການປົກຄອງ, ສ້າງຕັ້ງລະບອບໃໝ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ປີ 1975



ສະຫາຍ ໝື່ນ ສີມວິຈິດ
ກຳມະການສູນກາງພັກ
ປະທານປົກຄອງ
ນະຄອນຫຼວງວຽງຈັນ
ປີ 1975 - 1982 .



ສະຫາຍ ເພົ້າ ພິມມະຈັນ
ກຳມະການສູນກາງພັກ
ປະທານປົກຄອງ
ນະຄອນຫຼວງວຽງຈັນ
ປີ 1982 - 1984



ສະຫາຍ ຄຳບູ່ ສຸນິໄຊ
ກຳມະການສູນກາງພັກ,
ປະທານປົກຄອງ ນະຄອນຫຼວງ
ວຽງຈັນ ແຕ່ປີ 1984 - 1986.



ສະຫາຍ ສີສະຫວາດ ແກ້ວບຸນ
ພັນ. ກຳມະການ ກົມການ
ເມືອງສູນກາງພັກ, ເຈົ້າຄອງ
ນະຄອນຫຼວງວຽງຈັນ
ແຕ່ປີ 1987 - 1991



ສະຫາຍ ອຸດົມ ຂັນທີຍະ
ກຳມະການກົມການເມືອງ
ສູນກາງພັກ, ເລຂາຄະນະພັກ
ນະຄອນຫຼວງວຽງຈັນ ແຕ່ປີ
1991 - 1993.



ສະຫາຍ ບຸນຍັງ ວໍລະຈິດ
ກຳມະການກົມການເມືອງ
ສູນກາງພັກ, ເຈົ້າຄອງ
ນະຄອນຫຼວງວຽງຈັນ
ແຕ່ປີ 1993 - 1996.



ສະຫາຍ ຄຳປານ ພິລາວົງ
ກຳມະການສູນກາງພັກ,
ເຈົ້າຄອງນະຄອນຫລວງ
ວຽງຈັນ
ແຕ່ປີ 1996 - 1998.



ສະຫາຍ ບຸນເຮືອງ ດວງພະຈັນ
ກຳມະການສູນກາງພັກ,
ເຈົ້າຄອງ ນະຄອນຫຼວງວຽງຈັນ
ແຕ່ປີ 1998 - 2001.



ສະຫາຍ ທອງສິງ ທຳມະວົງ
ກຳມະການກົມການເມືອງ
ສູນກາງພັກ, ເລຂາຄະນະ
ພັກ, ເຈົ້າຄອງນະຄອນຫຼວງ
ວຽງຈັນ ປີ 2001 - 2006.



ສະຫາຍ ສົມບັດ ເຢຍລີເຮີ
ຄະນະເລຂາທິການສູນກາງພັກ, ແຕ່ງຕັ້ງ
ເປັນເລຂາຄະນະພັກຕາມມະຕິຕົກລົງຂອງ
ສູນກາງພັກ ສະບັບເລກທີ80/ກມສພ
ລົງວັນທີ 09. ມິຖຸນາ. 2006. ແຕ່ງຕັ້ງ
ເປັນເຈົ້າຄອງ ນະຄອນຫລວງວຽງຈັນ
ຕາມລັດຖະດຳລັດຂອງປະທານປະເທດ
ແຫ່ງ ສປປ ລາວ ສະບັບເລກທີ 189/ປປທ.
ລົງວັນທີ 31 ຕຸລາ 2008



ທ່ານ ດຣ ສົມລະວົງ
ຄຸດໄພທູນ ກຳມະການສູນ
ກາງພັກ ລັດຖະມົນຕີ ວ່າ ການ
ແຜນການ ແລະ ການລົງທຶນ.
ຮອງເລຂາພັກ, ເຈົ້າຄອງ
ນະຄອນຫລວງວຽງຈັນ.
ປີ 2006 - 2009.

ຄຳເຫັນຂອງ ທ່ານ ດຣ ສິນລະວົງ ຄຸດໄພທູນ ກຳມະການສູນກາງພັກ ລັດຖະມົນຕີ ວ່າ ການແຜນການ ແລະ ການລົງທຶນ. ອະດີດ ເຈົ້າຄອງນະຄອນຫລວງວຽງຈັນ ປີ (2006 - 2009)ກ່ຽວກັບແຜນປະຕິບັດງານສະເຫລີມສະຫລອງ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ.



ທ່ານ ດຣ ສິນລະວົງ ຄຸດໄພທູນ ກຳມະການສູນກາງພັກ ລັດຖະມົນຕີ ວ່າ ການແຜນການ ແລະ ການລົງທຶນ. ຮອງເລຂາພັກ, ເຈົ້າຄອງນະຄອນຫລວງວຽງຈັນ. ປີ 2006 - 2009.

- ອີງຕາມການຕົກລົງຂອງ ກົມການເມືອງສູນກາງພັກ ທີ່ໄດ້ກຳນົດໄວ້ຢູ່ໃນແຈ້ງການ ຂອງຫ້ອງວ່າການສູນກາງພັກ, ສະບັບເລກທີ 352/ຫສພ, ລົງວັນທີ 4 ກໍລະກົດ ປີ 2007 ແລະ ການຕົກລົງຂອງ ລັດຖະບານ ທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບ ເລກທີ78/ນຍ, ລົງວັນທີ 30 ກໍລະກົດ 2007 ກ່ຽວກັບການອະນຸມັດໃຫ້ ນະຄອນຫລວງວຽງຈັນ ສະເຫລີມສະຫລອງວັນ ນະຄອນຫລວງວຽງຈັນ ຄົບຮອບ 450 ປີ (2010).

- ອີງຕາມມະຕິກອງປະຊຸມ ຄະນະບໍລິຫານງານພັກ ນະຄອນຫລວງວຽງຈັນ ຄັ້ງທີ IV (ສະໄໝທີ IV) ຄັ້ງວັນທີ 22 - 26 ມັງກອນ ປີ 2007 ແລະ ການຕົກລົງຂອງຄະນະປະຈຳພັກ ຄັ້ງວັນທີ 2/10/2007 ແລະ ຜົນຂອງກອງປະຊຸມ ຄັ້ງປະຖົມມະເລີກ ຂອງຄະນະກຳມະການຈັດງານວຽງຈັນ 450 ປີ ຄັ້ງວັນທີ 26/9/2007.

- ເພື່ອເປັນການປຸກລະດົມທຸກພາກສ່ວນ ໃຫ້ເຂົ້າຮ່ວມແຂ່ງຂັນຂຳນັບຮັບຕ້ອນ ວັນນະ ຄອນຫລວງວຽງຈັນ ຄົບຮອບ 450 ປີ. ພວກເຮົາຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດບັນດາວຽກຈຸດ ສຸມຄືດັ່ງ ຕໍ່ໄປນີ້:

I. ສຸມໃສ່ຈັດຕັ້ງປະຕິບັດ 21 ໂຄງການຄື.

1. ໂຄງການສ້າງຄຸ້ມເມືອງວຽງຈັນ 450.



2. ໂຄງການພັດທະນາແຄມຂອງ ແລະ ໄກ່ເກ່ຍສິ່ງກີດຂວາງຕ່າງໆ.



ນະຄອນຫຼວງວຽງຈັນ


ຊື່ໂຄງການ : ໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ
ກິດຈະກຳກໍ່ສ້າງ : ປ້ອງກັນຕາຝັ່ງເຈື່ອນ, ຄູປ້ອງກັນນ້ຳຖ້ວມ, ທາງເລາະແຄມຂອງ ແລະ ສວນເຈົ້າອະນຸວົງ
ແຫຼ່ງທຶນ : ເງິນກູ້ຢືມດອກເບ້ຍຕ່ຳ ຈາກອົງການພັດທະນາເອດຖະກິດເກົາຫຼີ **EDCF** ຈຳນວນມູນຄ່າກໍ່ສ້າງທັງໝົດ **30,855,000 USD**
ເຈົ້າຂອງໂຄງການ : ພະແນກ ຍທຂ ນະຄອນຫຼວງວຽງຈັນ
ບໍລິສັດ ທີ່ປຶກສາ : ບໍລິສັດ ອີສານ ໂຄໂປຣເລຊັ່ນ ຈ. ເກົາຫຼີ
ບໍລິສັດ ຮັບເໝົາກໍ່ສ້າງ : ບໍລິສັດ ເຮ້ຈ ເຮ້ຈ ໂອ ເຮືອງ ຮາ ອິນດັສຕຣີ ຈຳກັດ
ໄລຍະເວລາກໍ່ສ້າງ : ເລີ່ມປີ 2009 ຫາ ປີ 2013



3. ໂຄງການສ້າງຖະໜົນວຽງຈັນ 450 ປີ.



4. ປັບປຸງຍົກລະດັບສະໜາມຫລວງ, ພະທາດຫລວງ ແລະ ເດີ່ນພະທາດຫລວງ, ຫໍຫໍ່າ ມະສະພາ.



ແຜນຜັງປັບປຸງສະໜາມຫລວງ





ສວນໄຊເຊດຖາ



5. ໂຄງການກໍ່ສ້າງ ສຳນັກງານປົກຄອງ ແລະ ສະພາເຂດ I ນະຄອນຫລວງວຽງຈັນ.



ສຳນັກງານປົກຄອງນະຄອນຫລວງວຽງຈັນ



ການກໍ່ສ້າງສຳນັກງານປົກຄອງນະຄອນຫລວງວຽງຈັນ

6. ປັບປຸງຍົກລະດັບຖະໜົນ ສຸພານຸວົງ.







ເປີດໂຄງການກໍ່ສ້າງຖະໜົນສຸພານຸວົງ


7. ໂຄງການກໍ່ສ້າງສະໜາມ ກິລາຊີເກມ ຄັ້ງທີ 25, ສະໜາມກ໋ອຟ ແລະ ໄກ່ເກ່ຍສິ່ງກີດຂວາງຕ່າງໆ.



ສະໜາມກິລາແຫ່ງຊາດ

8. ໂຄງການບູລະນະວັດສີສະເກດ.









9. ໂຄງການໜອງຫາ.


10. ໂຄງການກຳນົດຜັງເມືອງວຽງຈັນ III.



ຜັງເມືອງ ນະຄອນຫລວງວຽງຈັນ ແບບທີ 1



ຜັງເມືອງ ນະຄອນຫລວງວຽງຈັນ ແບບທີ 2



ຜັງເມືອງ ນະຄອນຫລວງວຽງຈັນ ແບບທີ 3

11. ຕະຫລາດຊາຍແດນ.

12. ໂຄງການບູລະນະຫໍພະແກ້ວ.



13. ໂຄງການຕະຫລາດ 4 ແຫ່ງ ໃນຕົວເມືອງ.



ສູນການຄ້າຕະຫລາດເຊົ້າ




ຕະຫລາດໜອງຈັນ

14. ໂຄງການສ້າງສວນດອກໄມ້ປະດັບ.

15. ໂຄງການກໍ່ກັບການສະແດງ ແລະ ສ້າງຮູບເງົາ ວຽງຈັນ 450 ປີ.

16. ໂຄງການປັບປຸງຫລັກເມືອງ.



ໃບເສນາ ຫລັກເມືອງ ຖືກຄົ້ນພົບ
ໃນວັນທີ 16 / 01 / 2007
29 / 12 / 2009
07 / 01 / 2010
ໃນເວລາສ້າງທາງເຊດຖາທິລາດ.



ໂຄງການກໍ່ສ້າງຫໍຫລັກເມືອງ

ຫ້າມຈໍາໜ່າຍ



ການກໍ່ສ້າງຫໍຫລັກເມືອງ

17. ໂຄງການປັບປຸງສວນສາທາລະນະ ໜອງຈັນ ແລະ ຕະຫລາດໜອງຈັນ.

18. ໂຄງການສ້າງບ້ານ - ກຸ່ມບ້ານພັດທະນາ.





19. ໂຄງການຜະລິດຂອງຂວັນ 450 ປີ.







20.ໂຄງການແກ້ໄຂປະກົດການຫຍໍ້ທໍ້, ຈັດສັນ ແລະ ລະດົມທາສີເຮືອນ.




21. ໂຄງການບູລະນະສວນວັດຊຽງຄວນ ແລະ ທາດຖິ່ມຊ້ອຍ ເມືອງ ປາກງື່ມ.









II. ພັດທະນາ ນະຄອນຫລວງ ວຽງຈັນໃຫ້ບັນລຸຕາດໝາຍ 6 ສ.

1. ຄວາມເປັນມາ ແລະ ຄວາມໝາຍຂອງ 6 ສ:

• ຄືໄດ້ຮູ້ນຳກັນແລ້ວວ່າ ນະຄອນວຽງຈັນ ແມ່ນເມືອງໜຶ່ງ ທີ່ເກົ່າແກ່ຂອງປະເທດລາວ ແລະ ຂອງພາກພື້ນ. ຕາມພົງສະວະດານລາວແລ້ວ ເມືອງວຽງຈັນ ປະກົດຕົວຂຶ້ນເມື່ອງ ພສ 236 ໂດຍ ທ່ານ ບູລີຈັນ ເປັນຜູ້ນຳພາສ້າງກໍ່ ແລະ ເມືອງວຽງຈັນ ຖືກສະຖາປະນາເປັນເມືອງຫລວງຂອງ ອານາຈັກລ້ານຊ້າງ ເມື່ອປີ 1560 ໂດຍ ເຈົ້າ ໄຊເຊດຖາທິລາດ ຊຶ່ງຍົກຍ້າຍຈາກເມືອງຫລວງພະບາງ. ໃນໄລຍະເວລາອັນຍາວນານ ເຖິງ 450 ປີ ເມືອງວຽງຈັນ ໄດ້ຜ່ານຫລາຍສະໄໝການປົກຄອງທີ່ແຕກຕ່າງກັນ, ແຕ່ເມືອງວຽງຈັນຍັງຄົງດຳລົງບົດບາດເປັນ ເມືອງຫລວງຂອງຊາດລາວ ຈົນມາເຖິງເທົ້າທຸກວັນນີ້. ໃນຖານະເປັນເມືອງຫລວງຂອງປະເທດ ບໍ່ວ່າສະໄໝໃດນະຄອນຫລວງວຽງຈັນ ໄດ້ຮັບການເອົາໃຈໃສ່ປັບປຸງ ບູລະນະໃຫ້ເຕີບໃຫຍ່ເຂັ້ມແຂງ ຢ່າງ

ຮອບດ້ານຈາກປະມຸກລັດ ແລະ ລັດຖະບານ, ປະຊາຊົນຊາວ ນະຄອນຫລວງວຽງຈັນ ຍາມໃດກໍ່ມີຄວາມຮັບຜິດຊອບ ແລະ ກາຍເປັນຕົວແທນຂອງປະຊາຊົນລາວທົ່ວປະເທດ, ແຕ່ຖານະ ແລະ ຊື່ສຽງຂອງ ນະຄອນຫລວງວຽງຈັນ ພົ້ນເດັ່ນກວ່າໝູ່ໃນເວທີສາກົນ ແລະ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວທັງຊາດ ແມ່ນເລີ່ມຈາກປະເທດລາວ ໄດ້ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເມື່ອປີ 1975 ເປັນຕົ້ນມາ.

- ໃນຕະຫລອດໄລຍະເວລາ 33 ປີ ພາຍໃຕ້ລະບອບໃໝ່: ນະຄອນຫລວງວຽງຈັນ ໄດ້ຮັບການພັດທະນາດີຂຶ້ນຢ່າງຕໍ່ເນື່ອງ ແລະ ມີທ່ວງທ່າຂະຫຍາຍຕົວໃໝ່ ຕາມທິດທັນເປັນຕົວເມືອງ (Urbanization) ອັນເກີດຈາກປັດໄຈການເກີດຂຶ້ນ ແລະ ການທັນເປັນອຸດສາຫະກຳຕາມກົນໄກເສດຖະກິດຕະຫລາດ, ການເຂົ້າຮ່ວມ ເສດຖະກິດ ກັບສາກົນ ແລະ ພາກພື້ນ; ແຕ່ຄຽງຄູ່ກັນນັ້ນ ນະຄອນຫລວງວຽງຈັນ ກໍ່ຍັງບໍ່ທັນຜ່ານພົ້ນ ຈາກສະພາວະດ້ອຍພັດທະນາ ແລະ ຄວາມທຸກຍາກໄດ້ເທື່ອ, ໂຄງລ່າງຍັງອ່ອນນ້ອຍ, ມີສິ່ງທ້າທາຍທິດສອບສຳຄັນຫລາຍປະການ: (ການຂະຫຍາຍຕົວຂອງພົນລະເມືອງສູງ, ຄວາມຮຽກຮ້ອງຕ້ອງການຂອງຊາວເມືອງ ນັບມື້ນັບສູງຂຶ້ນ ກັບຄວາມສາມາດຮັກສາສິ່ງແວດລ້ອມ, ທ່າອ່ຽງການຂະຫຍາຍຕົວ ຕາມກົນໄກເສດຖະກິດຕະຫລາດ ແບບເສລີ ກັບການອຳນວຍຄວບຄຸມຜັງເມືອງບໍ່ແຂງແກ່ນ; ການຫລຸດໂຕນກັນລະຫວ່າງເຂດເທດສະບານກັບເຂດຊານເມືອງ; ປະກົດການຫຍໍ້ທໍ້ໃນສັງຄົມ ກັບຄວາມສາມາດຄຸ້ມຄອງຂອງອົງການລັດ ແລະ ການຫລຸດໂຕນ ກັບບັນດາ ນະຄອນ ອື່ນໃນໂລກ ແລະ ພາກພື້ນ...) ດ້ວຍເຫດນັ້ນ ພວກເຮົາຊາວນະຄອນຫລວງວຽງຈັນ ຕ້ອງຮ່ວມໃຈກັນຫາທາງອອກ, ຮີບຮ້ອນພັດທະນາຕົວເມືອງຂອງເຮົາ, ເຮົາຮັກເມືອງວຽງຈັນ, ເຮົາຕ້ອງຍົກສູງຄວາມຮັບຜິດຊອບໃນລະດັບສູງ ເພື່ອສ້າງເມືອງຂອງເຮົາໃຫ້ເປັນ**ເມືອງໜ້າຢູ່ ແລະ ຍືນຍົງ**.

- ການພັດທະນາຕົວເມືອງ ໃຫ້ເປັນເມືອງໜ້າຢູ່ ແລະ ຍືນຍົງຂອງຕ່າງປະເທດ ແຕ່ລະພື້ນທີ່ມີຄວາມຄ້າຍຄືກັນ ແລະ ກໍ່ມີຄວາມແຕກຕ່າງກັນ ແລ້ວແຕ່ສະພາວະຂອງຄວາມຮຽກຮ້ອງຕ້ອງການ ໃນແຕ່ລະໄລຍະຂອງຕົວເມືອງນັ້ນໆ. ສຳລັບ ນະຄອນວຽງຈັນ ມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ, ຄຳເຫັນຊີ້ນຳຂອງກົມກອງເມືອງສູນກາງພັກ, ລັດຖະບານໃຫ້ເພີ່ມທະວີຄວາມຮັບຜິດຊອບ ໃນການສ້າງສະຖຽນລະພາບທາງການເມືອງ ຄວາມເປັນລະບຽບຮຽບຮ້ອຍ ດ້ານສັງຄົມຢ່າງໜັກແໜ້ນ, ສ້າງເມືອງວຽງຈັນ ໃຫ້ເປັນເມືອງຜະລິດ, ທຸລະກິດ, ບໍລິການ ແລະ ສູນກາງການເມືອງ, ເສດຖະກິດ, ວັດທະນະທຳ - ສັງຄົມຂອງຊາດ, ເປັນສູນກາງ ແຫ່ງການພົວພັນຮ່ວມມື ກັບສາກົນ ພ້ອມກັນນັ້ນ ກໍ່ໃຫ້ມີການປັບປຸງໂສມໜ້າຕົວເມືອງໃຫ້ເປັນເມືອງໜ້າຢູ່, ສະອາດ. ໃນຖານະທີ່ເປັນຜູ້ບໍລິຫານຕົວເມືອງວຽງຈັນ, ຂ້າພະເຈົ້າ ຮ່ວມກັບໝູ່ຄະນະນຳ ໄດ້ພະຍາຍາມຄົ້ນຄວ້າຊອກຫາຮູບການ, ວິທີການຊັກຊວນໃຫ້

ພົນລະເມືອງວຽງຈັນ ເຂົ້າຮ່ວມສ້າງສາ ພັດທະນາ ຕົວເມືອງວຽງຈັນ ເພື່ອໃຫ້ບັນລຸຈິດໃຈຊີ້ນຳ ຂອງຂັ້ນເທິງ, ໂດຍໄດ້ເອົາ 6 ປັດໄຈທຳອິດ ເປັນຫລັກ ຄື: ສ້າງເມືອງວຽງຈັນ ໃຫ້ເປັນເມືອງ **ຄວາມສະຫງົບສຸກ, ສະອາດ, ສີຂຽວ, ສະຫວ່າງ, ສະເໝ່ ແລະ ສີວິໄລ.** ຫລື ເວົ້າຫຍໍ້ແມ່ນ 6 **ສ** ແລະ ຖ້າເຮັດໄດ້ຕາມ 6 ສ ນັ້ນ ກໍ່ຖືວ່າສົມກຽດ ແລະ ສະແດງໃຫ້ເຫັນບົດບາດເປັນ ນະຄອນ ຫລວງ ຂອງປະເທດ ສປປ ລາວ ໃນຕົ້ນສະຕະວັດທີ 21 ນີ້ໄດ້. ສ່ວນບັນຫາການສ້າງຕົວເມືອງ ວຽງຈັນ ໃຫ້ເປັນເມືອງສວຍງາມ ແລະ ທັນສະໄໝ... ຍັງເປັນເວລາຂອງອານາຄົດຕໍ່ໄປ.

ຄວາມໝາຍ 6 ສ.

- **ສ**: ມາຈາກຄຳເວົ້າທີ່ວ່າ: ໂສມໜ້າຕົວເມືອງ ຫລື ສິ່ງແວດລ້ອມຂອງຕົວເມືອງ (Face the city) **ໂສມໜ້າຂອງຕົວເມືອງ** ປຽບເໝືອນໃບໜ້າຂອງຄົນເຮົາ. ໃບໜ້າຂອງຄົນເຮົາເປັນ ບ່ອນສະແດງອອກ ແລະ ເປັນຕົວແທນຢ່າງລວມສູນຂອງຮ່າງກາຍ ແລະ ຜົນການເຄື່ອນໄຫວ ຂອງຄົນເຮົາ. ໂສມໜ້າຕົວເມືອງກໍ່ເຊັ່ນດຽວກັນ ແມ່ນສິ່ງສະແດງອອກໃຫ້ເຫັນຢ່າງສັງລວມ, ການເຄື່ອນໄຫວຢ່າງຮອບດ້ານໃນອາດີດ, ປະຈຸບັນຂອງຊຸມຊົນໃນເມືອງນັ້ນໆ ສາມາດບົ່ງບອກ ໃຫ້ແຂກເມືອງໄດ້ສຳພັດ ຮູ້ເຫັນເຖິງເຄົ້າພາບຂອງຕົວເມືອງນັ້ນໆ ວ່າ ຈະດີ - ບໍ່ດີ. ໝາຍຄວາມ ວ່າ: ໂສມໜ້າຂອງຕົວເມືອງ ແມ່ນເວົ້າເຖິງ ການເຄື່ອນໄຫວ ການພັດທະນາຂອງຊຸມຊົນ, ຕົວ ເມືອງນັ້ນໆ ນັບທັງໃນດ້ານໂຄງລ່າງ, ເສດຖະກິດ, ວັດທະນະທຳ - ສັງຄົມ, ວິທະຍາສາດ, ການ ເມືອງ, ການປົກຄອງ, ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ການຕ່າງປະເທດ ແລະ ອື່ນໆ.


- 6 ສ ທີ່ກ່າວມານີ້, ສ່ອງແສງໃຫ້ເຫັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ, ແຜນການ 5 ປີ ຄັ້ງທີ VI, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ແລະ ຄວາມມຸ້ງຫວັງຂອງປະຊາຊົນຂັ້ນຄົນຕ່າງໆ, ໂດຍສະເພາະຄວາມ ຮຽກຮ້ອງຕ້ອງການ ໃນການເປັນເຈົ້າພາບ ມະຫະກຳ ກິລາຊີເກມ ຄັ້ງທີ 25 (2009), ການສະ ເຫລີມສະຫລອງ ວັນວຽງຈັນ ເປັນ ນະຄອນຫລວງ ຄົບຮອບ 450 ປີ (2010), ວັນສະຖາປະ ນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 35 ປີ (2010)... ໃນຄວາມ ເລັ່ງທວງຂອງສະພາບການດັ່ງກ່າວ ຄະນະພັກ - ອົງການປົກຄອງ ນະຄອງຫລວງວຽງຈັນ, ນຳ ສະເໜີ ລັດຖະບານ ແລະ ກົມການເມືອງ ໃນກອງປະຊຸມ ຄັ້ງວັນທີ 28 - 29/6/2007 ແລະ ຖືກ ປະກາດໃຊ້ຈາກ ຄະນະກຳມະການ ສະເຫລີມສະຫລອງ ວັນວຽງຈັນ ເປັນນະຄອນຫລວງຄົບ ຮອບ 450 ໃນວັນທີ 12 ຕຸລາ ປີ 2007 (ປົດຖະແຫລງການຂອງ ຄະນະກຳມະການ ໜ້າທີ 6) ແລະ ຖືເປັນໜຶ່ງໃນຂໍ້ແຂ່ງຂັນ 7 ຂໍ້ ຂອງອົງການປົກຄອງ ນະຄອນຫລວງວຽງຈັນ (ຄຳແນະນຳ ຂອງເຈົ້າຄອງ ນະຄອນຫລວງວຽງຈັນ ສະບັບ ເລກທີ 10/ຈນວ, ລົງວັນທີ 11 ຕຸລາ 2007, ໜ້າ ທີ 3).

• 6 ສ ແມ່ນກິນໄກ ແລະ ແມ່ນສິລະປະ ໃນການຂົນຂວາຍ ປະຊາຊົນ ເພື່ອປະຕິບັດທິດທາງໜ້າທີ່ໃຫຍ່ຂອງພັກ, ແຜນງານ - ໂຄງການຈຸດສຸມທີ່ອີງການປົກຄອງ ນະຄອນຫລວງວຽງຈັນ ວາງອອກ ໂດຍແນໃສ່ສຶກສາອົບຮົມ ບົ່ມເພາະຈິດສຳນຶກຂອງຊາວເມືອງ ຊັ້ນຄົນຕ່າງໆ ໃຫ້ມີສ່ວນຮ່ວມ ແລະ ມີພັນທະປະກອບສ່ວນສ້າງເມືອງຂອງຕົນເອງ ໃຫ້ເປັນເມືອງໜ້າຢູ່ ມີຄວາມຈະເລີນວັດທະນາຍິ່ງໆ ຂຶ້ນ ແລະ ຍືນຍົງຕະຫລອດໄປ. ຖ້າເມືອງວຽງຈັນ ບັນລຸ 6 ສ ຈະເປັນຜົນປະໂຫຍດໃຫຍ່ຫລວງ ໃຫ້ແກ່ພວກເຮົາເອງ ນັ້ນແມ່ນການລົງທຶນຍິ່ງເພີ່ມສູງ ແລະ ມີຈັງຫວະໄວຂຶ້ນ, ການທ່ອງທ່ຽວຈະກ້າວກະໂດດ ອັນເປັນລາຍໄດ້ຈ່ອງດຶງ ເຮັດໃຫ້ເສດຖະກິດຈະເລີນເຕີບໂຕ, ແກ້ໄຂວຽກເຮັດງານທຳ, ການມີລາຍໄດ້ຂອງຊາວເມືອງເພີ່ມຂຶ້ນໄວ ສ້າງຄວາມຢູ່ເຢັນເປັນສຸກໃຫ້ປະຊາຊົນດີຂຶ້ນ, ສຸດທ້າຍກໍ່ເປັນການນຳເອົາ ນະຄອນຫລວງວຽງຈັນ ຜ່ານພົ້ນຈາກສະພາວະຄວາມທຸກຍາກ ແລະ ດ້ອຍພັດທະນາໄດ້.

III. ກຳນົດໝາຍ ແລະ ໂຄງການປະຕິບັດ 6 ສ.

ກ. ສ້າງເມືອງວຽງຈັນ ໃຫ້ເປັນເມືອງແຫ່ງຄວາມສະຫງົບສຸກ (Peaceful City).

- ຄວາມເຂົ້າໃຈທົ່ວໄປກ່ຽວກັບ **ນະຄອນສະຫງົບສຸກ** ໝາຍເຖິງ: ນະຄອນທີ່ເອື້ອອຳນວຍໃຫ້ການດຳລົງຊີວິດຂອງຊາວເມືອງ ແລະ ແຂກເມືອງທຸກສາຂາອາຊີບຢູ່ໃນສະພາບທີ່ດີ, ຄວາມຢູ່ເຢັນເປັນສຸກ, ບໍ່ເດືອດຮ້ອນ, ບໍ່ກັງວົນເຖິງຄວາມປອດໄພຂອງຊີວິດ, ຊັບສິນ, ການເຄື່ອນໄຫວໄປມາ, ຄົບຄ້າສະມາຄົມໃນຊຸມຊົນ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນທົ່ວຕົວເມືອງສາມາດເຄື່ອນໄຫວວຽກງານ ແລະ ພັດທະນາຕົນເອງດ້ວຍຄວາມເພິ່ງພໍໃຈ.



- ກຳນົດໝາຍຂອງການສ້າງ ນະຄອນວຽງຈັນ ເປັນເມືອງສະຫງົບສຸກ:

+ ກຳນົດໝາຍແບບພາຍໃນ ແລະ ທາງເລິກ ແມ່ນໃຫ້ຖືເອົາ 4 ເນື້ອໃນ 4 ຄາດໝາຍ, ຊຶ່ງຄຳສັ່ງແນະນຳຂອງ ກົມການເມືອງ ສູນກາງພັກ ສະບັບເລກທີ 09/ກມສພ, ລົງວັນທີ 8/1/2004 ກຳນົດໄວ້ ແລະ ມະຕິຂອງຄະນະບໍລິຫານງານພັກ ນະຄອນຫລວງວຽງຈັນ ສະບັບເລກທີ 385/ຄພນວ, ລົງວັນທີ 28/9/2006 ວາງອອກ ໝາຍຄວາມວ່າ: ເຮັດທຸກສິ່ງທຸກຢ່າງເພື່ອຮັບປະກັນໃຫ້ ນະຄອນຫລວງວຽງຈັນ ໃນຖານະເປັນ ນະຄອນຫລວງ ຂອງປະເທດ ໃຫ້ມີຄວາມສະຫງົບ, ຄວາມ ເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ ແລະ ຖາວອນ: (ດ້ານການເມືອງ, ດ້ານເສດຖະກິດ, ວັດ ທະນະທຳ - ສັງຄົມ ແລະ ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ). ໜ້າທີ່ຍຸດທະສາດອັນນີ້ ໄດ້ກາຍເປັນພາລະກຳ ປະຫວັດສາດ ຄວາມຮັບຜິດຊອບ, ກຽດສັກສີຂອງອົງຄະນະພັກ - ອຳນາດການປົກຄອງ, ພະນັກງານ, ລັດຖະກອນ ແລະ ຊາວນະຄອນຫລວງວຽງຈັນ ທຸກຖ້ວນໜ້າ.

+ ກຳນົດໝາຍທົ່ວໄປ ສ້າງນະຄອນສະຫງົບສຸກຮ່ວມ ມີ:

- ຮັບປະກັນການຈາລະຈອນ ສະດວກສະບາຍ ເປັນລະບຽບລະບຽບ, ບໍ່ແອອັດ.
- ຍັບຍັ້ງ ບໍ່ໃຫ້ມີອຸປະຕິເຫດເກີດຂຶ້ນ ແລະ ເກີດຂຶ້ນໃນອັດຕາສ່ວນຕ່ຳ.
- ບໍ່ມີການລັກ, ປຸ້ນ ແລະ ສໍ້ໂກງຊັບຂອງພົນລະເມືອງ.
- ໃນຊຸມຊົນ (ບ້ານ) ບໍ່ມີຂໍ້ຂັດແຍ່ງ, ບໍ່ມີຄະດີຄວາມ ແລະ ບໍ່ມີການປະຖະກັນ.
- ຍັບຍັ້ງອັກຄີໄພ ແລະ ສາມາດແກ້ໄຂອັກຄີໄພ ໃນລະດັບວ່ອງໄວ (ສູງສຸດ 10 ນາທີ ໃຫ້ໄປເຖິງເປົ້າໝາຍ).
- ບໍ່ມີຜູ້ຫວ່າງງານ, ບໍ່ມີຄອບຄົວທຸກຍາກ.
- ຮັບປະກັນດ້ານສະຫວັດດີການທີ່ຈຳເປັນ ນັບມື້ສູງຂຶ້ນຂອງພົນລະເມືອງ ໃຫ້ໄດ້ໂດຍພື້ນຖານ.



- ໂຄງການຈັດຕັ້ງປະຕິບັດ.

1. ໂຄງການປ້ອງກັນຊາຍແດນ (ກອງບັນຊາການທະຫານ).

2. ໂຄງການປ້ອງກັນຕົວເມືອງ, (ບ້ານ, ສຳນັກງານ - ອົງການ, ປູຊະນີຍະສະຖານ). (ກອງບັນຊາການ ປກສ).

3. ໂຄງການຫລຸດຜ່ອນ ປະກົດການຫຍໍ້ທໍ້ ໃນສັງຄົມ (ກອງບັນຊາການ ປກສ ນະຄອນຫລວງວຽງຈັນ ແລະ ຣາກຖານ).

4. ໂຄງການປ້ອງກັນ ແລະ ແກ້ໄຂອັກຄີໄພ (ກອງຕຳຫລວດດັບເພີງ).

5. ໂຄງການຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ແລະ ຄຸ້ມຄອງການ ຈາລະຈອນຕາມທ້ອງຖະໜົນ (ກອງບັນຊາການ ປກສ, ພະແນກ ໂຍທາທິການ ຂົນສົ່ງ).

6. ໂຄງການຄຸ້ມຄອງ ພົນລະເມືອງ ແລະ ຄອບຄົວທຸກຍາກ ແກ້ໄຂໄພວ່າງງານ (ພະແນກແຮງງານ - ສະຫວັດດີການສັງຄົມ, ຣາກຖານ).

7. ໂຄງການສ້າງເຮືອນສະຫວັດດີການ (ພະແນກແຮງງານ-ສະຫວັດດີການສັງຄົມ).

8. ປ້ອງກັນ ແລະ ແກ້ໄຂພະຍາດລະບາດ (ພະແນກສາທາລະນະສຸກ).

9. ໂຄງການພັດທະນາ ພື້ນຖານໂຄງລ່າງສາທາລະນຸປະໂຫຍດ ແລະ ຂະຫຍາຍລົດຂົນສົ່ງ ສາທາລະນະ (ພະແນກໂຍທາທິການ - ຂົນສົ່ງ, ຂະແໜງການກ່ຽວຂ້ອງ).

10. ໂຄງການສ້າງບ້ານປອດຄະດີ, ຊຸມຊົນສາມັກຄີ (ພະແນກຍຸດຕິທຳ - ແນວລາວສ້າງຊາດ).

11. ໂຄງການສ້າງບ້ານ ປອດຢາເສບຕິດ (ຄະນະຄວບຄຸມຢາເສບຕິດ).

ຂ. ສ້າງນະຄອນວຽງຈັນເປັນເມືອງສະອາດ (Clean City).



- ນະຄອນ ຫລື ເມືອງ ສະອາດ ແມ່ນເມືອງທີ່ມີມາດຖານດ້ານສຸຂະອານາໄມສູງ ຫລື ຢ່າງໜ້ອຍກໍ່ແມ່ນຕົວເມືອງທີ່ບໍ່ມີສິ່ງເສດເຫລືອ, ບໍ່ມີຂີ້ເຫຍື້ອ, ບໍ່ມີສຽງກະທົບເກີນກຳນົດ, ບໍ່ມີລັງສີ.

- ກຳນົດໝາຍຕົວເມືອງວຽງຈັນສະອາດ.


• **ຖະໜົນຫົນທາງສະອາດ:** ທຸກຖະໜົນຫລວງທຸກເສັ້ນ: ບໍ່ມີຂີ້ເຫຍື້ອ, ບໍ່ເປິະເປື້ອນ, ບໍ່ມີຂີ້ຝຸ່ນ, ບໍ່ມີສິ່ງເສດເຫລືອ; ຮົກເຮື້ອ, ຕູບ ແລະ ສິ່ງຕໍ່ເຕີມຕາມແຄມທາງ.



• ເຄຫາສະຖານສະອາດ: (ເຄຫາສະຖານ) ທີ່ຢູ່ອາໃສ ເວົ້າລວມ: ເຮືອນຢູ່ຂອງຄອບຄົວ, ສຳນັກງານ, ຫ້ອງການ, ໂຮງຮຽນ, ໂຮງໝໍ, ໂຮງແຮມ... ນັບທັງກຳແພງ, ຮົ້ວ, ໃນເຂດຕົວເມືອງ ແລະ ຊານເມືອງ, ເຄຫາສະຖານສະອາດ ໝາຍເຖິງ: ການປົກປັກຮັກສາເຄຫາສະຖານເຫລົ່ານັ້ນ ໃຫ້ຢູ່ໃນສະພາບເດີມ, ເມື່ອເປ່ເພ ເກົ່າແກ່ແລ້ວ ກໍ່ຕ້ອງສ້ອມແປງ ບູລະນະໃຫ້ຢູ່ໃນສະພາບເດີມ, ທາສີ ເຮືອນເກົ່າ (ໃໝ່ທຸກເວລາ), ຖ້າເຄຫາສະຖານໃດບໍ່ສາມາດສ້ອມແປງໄດ້ ກໍ່ຕ້ອງຮື້ຖອນ ແລະ ປຸກສ້າງໃໝ່.



• **ນ້ຳສະອາດໝາຍເຖິງນ້ຳດື່ມ,** ນັບທັ້ງຮ່ອງນ້ຳຕາມແຄມຖະໜົນ, ໜອງນ້ຳທຸກໜອງ: ບໍ່ມີກິ່ນເໝັນ, ບໍ່ຖ້ວມຂັງ, ບໍ່ເປັນບ່ອນເພາະເຊື້ອພະຍາດ; ສາຍນ້ຳຫຼ້ຳ, ນ້ຳຂອງຕອນນະຄອນຫລວງວຽງຈັນ, ລວມທັງຫ້ວຍ, ຮ່ອງຕ່າງໆ ຮັກສາໄວ້ຢູ່ໃນເກນດີ.




• ຍານພາຫະນະຂົນສົ່ງ ສະອາດ (ນັບທັ້ງສ່ວນຕົວ ແລະ ສາທາລະນະ): ລົດຕ້ອງຄົບມາດຖານເຕັກນິກ, ຄວາມປອດໄພ, ບໍ່ສົ່ງຄັວນ, ລົດເກົ່າແລ້ວຕ້ອງສ້ອມແປງໃຫ້ເປັນປົກກະຕິ (ບໍ່ປົກກະຕິບໍ່ອະນຸຍາດໃຫ້ນຳໃຊ້).




• ໂຮງຈັກ, ໂຮງຊ່າງ, ໂຮງງານສະອາດຫລາຍແຫ່ງບໍ່ສິ່ງມົນລະພິດ, ສານເຄມີຕົກຄ້າງ, ບໍ່ສິ່ງຄວັນ, ບໍ່ມີກິ່ນ, ບໍ່ມີສຽງດັງເກີນກຳນົດ.



• ສາທາລະນຸປະໂຫຍດສະອາດ - ໝາຍເຖິງສວນສາທາລະນະ, ສວນອາຫານ, ສະຖານີລົດເມ, ສະຖານທີ່ຈອດລົດປະຈຳທາງ, ໂຮງລະຄອນ, ສະໂມສອນ, ຫໍວັດທະນະທຳ, ສະໜາມບິນ. ສາທາລະນູປະໂຫຍດສະອາດ ໝາຍເຖິງກິດຈະການເຫລົ່ານັ້ນ ບັນລຸມາດຕະຖານທີ່ທາງການກຳນົດ ແລະ ຮັກສາສະພາວະຈິບງາມ ໄດ້ທຸກເວລາຂອງການໃຊ້ງານ.



• ທ້ອງຟ້າວຽງຈັນສົດໃສ ໝາຍເຖິງທ້ອງຟ້າຂອງນະຄອນຫລວງ ບໍ່ມີຄວັນປົກຄຸມ, ບໍ່ມີສານພິດລະເຫີຍປົນເຈືອກັບອາກາດ, ອຸນຫະພູມ ຢູ່ໃນເກນປົກກະຕິ.



• ການບໍລິໂພກອາຫານສະອາດ.



- ແຜນວຽກງານຮັບປະກັນວຽງຈັນສະອາດ.

1. ໂຄງການຮັບປະກັນເສັ້ນທາງສະອາດ.

• ປັບປຸງສ້ອມແປງເສັ້ນທາງ ໃນທົ່ວນະຄອນວຽງຈັນ ເປັນຕົ້ນ ໃນເຂດຕົວເມືອງໃຫ້ຢູ່ ເກນດີ. (ຍທຂ, ອພບ).



• ປັບປຸງບູລະນະ ຂອບທາງ ແລະ ຖະໜົນ 16 ເສັ້ນ ດ້ວຍທຶນຂອງລັດ ແລະ ປະຊາຊົນ ພ້ອມກັນເຮັດ (ອພບ, ແຕ່ລະຄອບຄົວ).

• ແຜນວຽກເກັບມ້ຽນຂີ້ເຫຍື້ອ ແລະ ປະຕິຮູບກະຖ໋າງຂີ້ເຫຍື້ອຕາມຖະໜົນຫົນທາງ ແລະ ຂອບທາງ (ອພບ, ສິ່ງແວດລ້ອມ, ປະຊາຊົນແຕ່ລະຄອບຄົວ).

2. ໂຄງການ (ແຜນວຽກ) ຮັບປະກັນເຄຫາສະຖານສະອາດ:

• ແຜນວຽກມ້າງຕູບ, ເງິບ, ຍົກຍ້າຍສິ່ງເສດເຫລືອ ອອກຈາກແຄມທາງ (ຫ້ອງການຜັງ ເມືອງ ແລະ ອົງການປົກຄອງເມືອງກ່ຽວຂ້ອງ).

• ແຜນວຽກທາສີເຮືອນໃນເຂດຕົວເມືອງ (ແບບບັງຄັບ) ແລະ ທາສີເຮືອນທົ່ວໄປ ແບບ ປຸກລະດົມ (ທຸກພາກສ່ວນ ແລະ ອົງການປົກຄອງ).

• ແຜນວຽກຈັດສັນສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ, (ພະແນກ ພະລັງ ງານ ແລະ ອົງການ ໄອຊີທີ).

• ແຜນວຽກປຸກລະດົມມວນຊົນ ທຳຄວາມສະອາດ ປົກກະຕິຢູ່ເດີ່ນບ້ານ - ເຮືອນ, ຫ້ອງ ການ, ສຳນັກງານຂອງຕົນ (ທຸກພາກສ່ວນ).

• ໂຄງການປັບປຸງ ບູລະນະຮື້ອ ແລະ ເຮືອນເກົ່າຕາມແຄມທາງ (ຍທຂ, ອພບ ແລະ ທຸກ ພາກສ່ວນ).

3. ແຜນວຽກໂຄງການ ນ້ຳສະອາດ:

• ແຜນວຽກກວດກາ ແລະ ຄຸ້ມຄອງຮ່ອງນ້ຳ ໃນຕົວເມືອງ, ຊານເມືອງ ບໍ່ໃຫ້ອຸດຕັນທັງ ແລ້ງ ແລະ ຝົນ (ອພບ, ຍທຂ ແລະ ແຕ່ລະຄອບຄົວ).

• ໂຄງການບຳບັດໜອງນ້ຳ (ອົງການນ້ຳ ແລະ ສິ່ງແວດລ້ອມ, ອພບ, ສາທາລະນະສຸກ ແລະ ແຕ່ລະບ້ານ).

• ແຜນວຽກກວດກາ ແລະ ຄຸ້ມຄອງນ້ຳຖ້ຳເຮັດໃຫ້ນ້ຳຖ້ຳໃສ, ບໍ່ມີມົນລະພິດ, ອາບແລະ ຊົມໃຊ້ໄດ້ (ຍທຂ, ອົງການ ນ້ຳ - ສິ່ງແວດລ້ອມ ແລະ ເມືອງກ່ຽວຂ້ອງ).

• ແຜນວຽກຄຸ້ມຄອງ ນ້ຳຂອງ ໃຫ້ບັນລຸເກນຂອງ ອົງການແມ່ນ້ຳຂອງ: ບໍ່ມີມົນລະພິດ, ຊົມໃຊ້, ອາບໄດ້ (ອົງການແມ່ນ້ຳຂອງ, ຍທຂ).

• ແຜນວຽກກວດກາ ແລະ ຄຸ້ມຄອງການບໍລິໂພກນ້ຳດື່ມ ໃຫ້ບັນລຸມາດຖານຖືກຮັບຮອງ ຈາກອົງການກ່ຽວຂ້ອງ (ສາທາລະນະສຸກ).

4. ໂຄງການ ຫລື ແຜນວຽກຮັບປະກັນທ້ອງຟ້າສົດໃສ:

• ແຜນວຽກກວດກາກິດຈະກຳ ແລະ ຄຸ້ມຄອງການຈູດຂີ້ເຫຍື້ອ (ຂອງນະຄອນວຽງຈັນ ແລະ ທົ່ວໄປ), ການຈູດທົ່ງນາ, ຈູດປ່າໄມ້ (ກະສິກຳ - ປ່າໄມ້ ແລະ ອພບ).

• ແຜນວຽກຄວບຄຸມການນຳໃຊ້ສານປົນເຈືອ ໃນການກໍ່ສ້າງ (ອົງການວິທະຍາສາດ)

• ໂຄງການຫລຸດຜ່ອນ " ໂລກຮ້ອນ " (ອົງການຊັບພະຍາກອນ ນ້ຳ ແລະ ສິ່ງແວດລ້ອມ)

• ໂຄງການສ້າງຄວາມດຸນດ່ຽງ ສິ່ງແວດລ້ອມທຳມະຊາດ ໃນຂອບເຂດນະຄອນຫລວງ ວຽງຈັນ (ພະແນກ ວຕສ).

5. ແຜນວຽກຮັບປະກັນ ພາຫະນະສະອາດ.

• ໂຄງການ ຫລື ກິດຈະການກວດກາມາດຕະຖານ ເຕັກນິກລົດ ທຸກປະເພດ ປະຈຳປີ ຕໍ່ຄັ້ງ (ສ້າງຕັ້ງສູນກວດເຕັກນິກ ເມືອງລະ 1 ແຫ່ງ).

• ແຜນວຽກຄຸ້ມຄອງ ພາຫະນະເກົ່າ.

• ກຳຈັດລົດມີຄວັນຫລາຍ.

• ແຜນວຽກລ້າງຕີນລົດກ່ອນເຂົ້າຕົວເມືອງ.

• ຂົນສົ່ງບໍ່ເກີນອັດຕາບັນຈຸ.

• ຄົ້ນຄວ້າແຜນການນຳໃຊ້ນຳມັນຊີວະພາບ Biodisell (ພະແນກວິທະຍາສາດ ແລະ

ເຕັກໂນໂລຊີ).

6. ໂຄງການ ຫລື ແຜນວຽກຮັບປະກັນໂຮງຈັກ, ໂຮງງານສະອາດ.

- ແຜນວຽກຈັດວາງການປຸກສ້າງ ໂຮງງານ ໃຫ້ເປັນກຸ່ມປະເພດຜົນກະທົບສິ່ງແວດລ້ອມ
- ແຜນວຽກກວດກາການເຄື່ອນໄຫວປັບໄໝ ໂຮງງານ ທີ່ລະເມີດກົດໝາຍສິ່ງແວດລ້ອມ

(ອຸດສາຫະກຳ - ການຄ້າ, ລົງທຶນ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ).

- ແຜນວຽກຈັດວາງເຂດອຸດສາຫະກຳ ແຂວງ ນະຄອນຫລວງວຽງຈັນ, ຂອງເມືອງ ແລະ ຈັດຜັງພາຍໃນເຂດ (ອຸດສາຫະກຳ).
- ຍົກຍ້າຍກິດຈະການທີ່ມີຜົນກະທົບສູງອອກຈາກຕົວເມືອງ.
- ແຜນວຽກກວດກາ ແລະ ຢັ້ງຢືນມາດຖານຂອງໂຮງງານໃນຕົວເມືອງ.
- ໂຄງການສ້າງຕັ້ງອົງການມາດຖານ ຂັ້ນ ນະຄອນຫລວງວຽງຈັນ ໃຫ້ເປັນເຄື່ອງມືກວດກາຄຸ້ມຄອງຕົ້ນຕໍ.

7. ແຜນວຽກຮັບປະກັນ ສາທາລະນຸປະໂຫຍດສະອາດ.

- ແຜນວຽກບູລະນະສວນສາທາລະນະ ແລະ ຈັດຕັ້ງໜ່ວຍຮັບຜິດຊອບ ແຕ່ລະສ່ວນເປັນສະເພາະ (ອພບ).
- ໂຄງການຟື້ນຟູ, ປົວແປງໂຮງຮຽນ, ໂຮງໝໍ, ໂຮງລະຄອນ, ສະໂມສອນ, ວັດ... ເຂົ້າສູ່ຄວາມເປັນລະບຽບລະບຽບ (ສຶກສາ, ສາທາ, ຖະແຫຼງຂ່າວ - ວັດທະນະທຳ ພາກສ່ວນກ່ຽວຂ້ອງ)
- ໂຄງການປັບປຸງສະຖານີລົດໂດຍສານ, ທ່າເຮືອ, ສະໜາມບິນ, ບ່ອນຈອດລົດເປັນລະບົບ ລະບຽບ (ຍທຂ, ອພບ, ປກສ).
- ໂຄງການປັບປຸງພິພິຕະພັນ, ຫໍວາງສະແດງ, ປູຊະນີຍະສະຖານ, ສະໜາມກິລານ້ອຍ - ໃຫຍ່ ໃຫ້ເປັນລະບົບລະບຽບ (ຖ.ວ, ກິລາ).
- ແຜນວຽກຈັດສັນຄວາມເປັນລະບຽບ, ຈິບຫາມຂອງໂຮງແຮມ, ເຮືອນຮັບແຂກ, ຫໍພັກ, ບ້ານພັກ, (ທ່ອງທ່ຽວ, ກອງບັນຊາການ ປກສ).
- ໂຄງການກິດຈະກຳ ຍົກລະດັບຕະຫລາດ ໃນຕົວເມືອງເປັນສູນການຄ້າ, ປັບປຸງຕະຫລາດ, ຮ້ານຄ້າທຸກແຫ່ງໃຫ້ເຂົ້າມາດຖານ ແລະ ເປັນລະບົບລະບຽບ.
- ແຜນວຽກ ກວດກາເປັນປົກກະຕິ ຕໍ່ການເຄື່ອນໄຫວຂອງທຸກສະຖານທີ່ ສາທາລະນຸປະໂພກ (ກອງບັນຊາການ ປກສ).

8). ແຜນວຽກ ແລະ ໂຄງການຮັບປະກັນການ ບໍລິໂພກສະອາດ.

- ແຜນວຽກກວດກາຄຸ້ມຄອງ ອາຫານ ແລະ ຢາ (ສາທາລະນະສຸກ).

• ໂຄງການສ້າງຕະຫລາດສົດ (ສັດປີກ) (ອຸດສາຫະກຳ - ການຄ້າ, ກະສິກຳ - ປ່າໄມ້ ແລະ ສາທາລະນະ).

• ກິດຈະການປູກພືດຜັກ ປອດສານເຄມີ (ກະສິກຳ).

• ກິດຈະກຳ ກຳຈັດແມງໄມ້ ແລະ ເຊື້ອພະຍາດໃນຊີ້ນສັດ ແລະ ໝາກໄມ້ (ກະສິກຳ, ສາທາລະນະສຸກ).

• ແຜນວຽກສົ່ງເສີມການບໍລິໂພກ ອາຫານ ເພື່ອສຸຂະພາບ (ສາທາລະນະສຸກ).

• ສົ່ງເສີມຍົກຍ້ອງບຸກຄົນ, ຄອບຄົວ, ການຈັດຕັ້ງຕ່າງໆ ທີ່ສາມາດປະຕິບັດ ກຳນົດໝາຍ ແລະ ຄຳຂວັນ ວຽງຈັນ ສະອາດ ແລະ ເມືອງສຸຂະອານາໄມດີ ຂອງອົງການສາທາລະນະສຸກ ນະຄອນຫລວງວຽງຈັນ ໄດ້ດີດ້ວຍທຸງ ແລະ ການໝາຍ.

• ສົ່ງເສີມສື່ມວນຊົນ ແນະນຳ ແລະ ຕຳນິວິຈານ ຕໍ່ສະພາບການບໍລິໂພກ.

• ປັບໄໝບຸກຄົນ, ຄອບຄົວ, ຮ້ານອາຫານ, ໂຮງຂ້າສັດ, ການຈັດຕັ້ງຂັ້ນຕ່າງໆ ທີ່ລະເມີດ ລະບຽບກົດໝາຍ ກ່ຽວກັບອາຫານ ແລະ ຢ່າ.

ຄ. ສ້າງນະຄອນວຽງຈັນ ເປັນເມືອງສີຂຽວ: (Green City).

- ນະຄອນ ສີຂຽວ: ແມ່ນນະຄອນທີ່ມີປ່າໄມ້ທຳມະຊາດ, ປ່າໄມ້ປູກ ໄມ້ປະດັບ ຕົ້ນໄມ້ ໃຫ້ຮົ່ມຕາມແຄມທາງ, ມີເດີ່ນຫຍ້າ, ມີສວນສາທາລະນະ, ສວນດອກໄມ້, ຕົ້ນໄມ້ໃຫ້ໝາຍ ນະຄອນ ສີຂຽວ ແມ່ນນະຄອນແບບໃໝ່, ມີຄວາມຈຳເປັນ ແລະ ຮຽກຮ້ອງຕ້ອງ ການຂອງທຸກ ນະຄອນ ເປັນຕົ້ນແມ່ນ ນະຄອນ ຢູ່ແຖບເຂດຮ້ອນ.

- ກຳນົດໝາຍການສ້າງນະຄອງວຽງຈັນ ເປັນນະຄອນສີຂຽວ:

+ ມາດຖານຂອງບັນດາ ນະຄອນ ອາຊີ ປີ 2008 ເນື້ອທີ່ ສີຂຽວ ກວມ 39%).

+ ນະໂຍບາຍຂອງລັດຖະບານ ສປປ ລາວ ແມ່ນສູ້ຊົນ ໃຫ້ມີປ່າໄມ້ 70% ຂອງພື້ນທີ່ ທົ່ວປະເທດ, ສ່ວນນະຄອນວຽງຈັນ ກວມບໍ່ຫລຸດ 60% ໃນນັ້ນ:

• ປ່າໄມ້ທຳມະຊາດ, ປ່າສະຫງວນໃຫ້ກວມ 40% ພື້ນທີ່. (ພູພະນັງ, ພູເຂົາຄວາຍ ແລະ ປ່າສະຫງວນນ້ອຍຂອງ ນະຄອນຫລວງວຽງຈັນ ແລະ ເມືອງ).

• ສວນສາທາລະນະ ແລະ ສວນດອກໄມ້ໃນຕົວເມືອງ 1 ແຫ່ງ /10.000 ຄົນ.

• ໄມ້ປູກແຄມຖະໜົນຫລວງ (ທາງ 13 ເໜືອ, ໃຕ້, ເລກທີ 10,11 ຖະໜົນມິດຕະພາບ ລາວ - ຍີ່ປຸ່ນ, ຖະໜົນຕັດໃໝ່ ໃຫ້ລະບຸ ລະບອບສຳປະສິດ ການນຳໃຊ້ທີ່ດິນ).

• ຕົ້ນໄມ້ປະດັບລຽບແຄມຖະໜົນ, ເຮືອນຢູ່, ສຳນັກງານ 3 ຕົ້ນ/ 1ຄົນ.

• ປູກຫຍ້າ ຕາມແຄມຖະໜົນ, ເດີ່ນບ້ານ, ສວນສາທາລະນະ ລວມທັງສະໜາມ ກ໋ອບ ແລະ ເດີ່ນຫຍ້າ ສະເພາະ (ເຂດຂຽວ) ສະເລ່ຍບໍ່ຫລຸດ 20 m^2/ 1 ຄົນ (ສາກົນ 5 m^2/1 ຄົນ).

• ສ້າງໃຫ້ມີໜອງນ້ຳ - ສວນສາທາລະນະໄມ້ ໃຫ້ຮົ່ມ, ເມືອງໜຶ່ງ 1 ແຫ່ງ 10 ເຮັກຕາ, ບ້ານໜຶ່ງ 1 ha ຂຶ້ນໄປ ສຳນັກງານໃຫຍ່ 1 ແຫ່ງ ບໍ່ຫລຸດ 0,5 ເຮັກຕາ.

- ໂຄງການຮັບປະກັນ ວຽງຈັນ ສີຂຽວ:

1. ໂຄງການ ຢຸດຕິການຖາງປ່າ ຮອດປີ 2010 ໃຫ້ໄດ້ຢ່າງສິ້ນເຊີງ (ເມືອງ ສັງທອງ, ກະສິກຳ - ປ່າໄມ້).

2. ໂຄງການຄວບຄຸມ ການບຸກເບີກດິນ - ປ່າ, ສິດນຳໃຊ້ດິນຂອງນິຕິບຸກຄົນ ແລະ ບຸກຄົນ (ກະສິກຳ - ປ່າໄມ້).

3. ໂຄງການປູກຕົ້ນໄມ້ ປະດັບຕາມເສັ້ນທາງ 13 ເໜືອ-ໃຕ້, ທາງເລກ 10 ແລະ 11 ຈຳນວນ 450.000 ຕົ້ນ ແລະ ຕົ້ນໄມ້ປະດັບ - ໄມ້ໃຫ້ຮົ່ມ ໃນເຂດຕົວເມືອງ (ອພບ, ກະ ສິກຳ - ປ່າໄມ້).

4. ໂຄງການຝຶກອົບຮົມ ແນະນຳການຈັດສຳປະສິດທີ່ດິນປຸກສ້າງເຮືອນຢູ່ (ພະແນກ ໂຍທາທິການ - ຂົນສົ່ງ).

5. ໂຄງການຮັກສາ ປ່າສະຫງວນແຫ່ງຊາດ ແລະ ປ່າສະຫງວນ ນະຄອນວຽງຈັນ, ສວນ ນິເວດ (ພະແນກກະສິກຳ - ປ່າໄມ້).

6. ໂຄງການຄວບຄຸມ ການປ່ຽນແປງດິນກະສິກຳ ແລະ ຮັກສາເຂດທົ່ງນາ, ຊົນລະ ປະທານ.

- ມາດຕະການສະເພາະວຽງຈັນ ສີຂຽວ.

• ຕຳນິວິຈານ ແລະ ປັບໄໝຕໍ່ເປົ້າໝາຍ, ການຈັດຕັ້ງ ທີ່ລະເມີດຕາມລະບຽບກົດໝາຍ ປ່າໄມ້, ກົດໝາຍສິ່ງແວດລ້ອມ.

• ສິ່ງເສີມຄອບຄົວ, ການຈັດຕັ້ງທີ່ຫ້າວຫັນ ແລະ ປະຕິບັດຄົບກຳນົດໝາຍ ສີຂຽວດ້ວຍ ທຸງ ແລະເຄື່ອງໝາຍວຽງຈັນ ສີຂຽວຂອງອົງການສິ່ງແວດລ້ອມນະຄອນຫລວງວຽງຈັນ.

ງ. ສ້າງວຽງຈັນ ເປັນນະຄອນສະຫວ່າງ (Light City).

- ນະຄອນສະຫວ່າງ: ໝາຍເຖິງເມືອງ ທີ່ມີຄວາມຮຸ່ງແຈ້ງ ໃນຍາມກາງຄືນ, ສະຫວ່າງ ແມ່ນເອກະລັກໜຶ່ງຂອງຕົວເມືອງ. ສຳລັບ ນະຄອນວຽງຈັນ ຄວາມຮຸ່ງໃນຍາມກາງຄືນບໍ່ທັນ ພຽງພໍເທື່ອ, ຫລາຍເສັ້ນທາງ, ຫລາຍປູຊະນີຍະສະຖານ ບໍ່ທັນຕອບສະໜອງຄວາມຕ້ອງການ ແລະຮັບປະກັນຄວາມສະດວກສະບາຍໃຫ້ການເຄື່ອນໄຫວຂອງພົນລະເມືອງ.

- ກຳນົດໝາຍ ສ້າງນະຄອນວຽງຈັນ ເປັນນະຄອນສະຫວ່າງ:

• **ຖະໜົນສະຫວ່າງ:** ຖະໜົນຫລວງແຫ່ງຊາດ, ຖະໜົນຂອງນະຄອນ, ເສັ້ນທາງໃນເທດສະບານເມືອງ, ເສັ້ນທາງປູຢາງ ໃຫ້ມີໄຟເຍືອງທາງ, ມີລະບົບໄຟອຳນາດໃນຈຸດຖະໜົນຄົບຈຳເປັນທົ່ວເຖິງ (ອພບ).

• **ສະຖານສາທາລະນະປະໂຫຍດ ສະຫວ່າງ:** ທຸກກິດຈະການມີລະບົບໄຟຟ້າໃຫ້ຄວາມສະຫວ່າງຍາມກາງຄືນ ເພື່ອສາມາດເຄື່ອນໄຫວຕາມເປົ້າໝາຍໄດ້ (ໃນສະເພາະໜ້ານີ້ 2010 ຮັບປະກັນໃຫ້ເດີ່ນສະໜາມຫລວງ, ສວນແຄມຂອງ, ສວນໜອງຈັນ, ໜອງດ້ວຍສະຫວ່າງ) (ອພບ).

• **ເຄຫາສະຖານສະຫວ່າງ:** ເຮືອນຢູ່, ສຳນັກງານທ້ອງການ, ໂຮງຮຽນ, ໂຮງໝໍ ແລະ ເສົາໄຟຟ້າ ໃຫ້ສິ່ງເສີມທາສີຂາວ ຫລື ສີງາຊ້າງ; ໂຮງງານທາສີ ມໍລະກົດ (ສີຄາມ); ຂົວ, ທາງ ທາສີນິນ (ດຳ).

• **ວັດ ແລະ ບູຮານສະຖານຮຸ່ງແຈ້ງ** ສາມາດດຳເນີນກິດຈະການສາສະໜາ ໄດ້ໃນຍາມກາງຄືນ, ວັດໃຫ້ທາສີຄຳ ຫລື ສີເຫລືອງ, ບູຮານສະຖານອື່ນ ທາຕາມເອກະລັກຂອງກິດຈະການນັ້ນ.

• **ທ້ອງຟ້າຂອງ ນະຄອນວຽງຈັນ ສະຫວ່າງ** ໝາຍເຖິງທ້ອງຟ້າ ວຽງຈັນ ມີແສງດາວໃນຄ່ຳຄືນ, ມີແສງແດດໃນຍາມກາງເວັນ, ເຫັນຕາເວັນຕົກດິນໃນເວລາຄ້ອຍຄ່ຳລົງແລງ ແລະ ອຳໄພ ໃນຍາມເດືອນຂຶ້ນ.

- ແຜນວຽກ (ໂຄງການ) ຮັບປະກັນນະຄອນວຽງຈັນ ສະຫວ່າງ.

1. ໂຄງການຕິດຕັ້ງໄຟເຍືອງ, ໄຟປະດັບທາງ ແລະ ໄຟອຳນາດໃນເຂດຕົວເມືອງ(ອພບ)
2. ໂຄງການຕິດຕັ້ງໄຟເຍືອງທາງ ໃນເຂດເທດສະບານຂອງເມືອງຕ່າງໆ (ຍທຂ)
3. ໂຄງການຕິດຕັ້ງໄຟເຍືອງ ໃນສະຖານທີ່ສາທາລະນະປະໂຫຍດ (ອພບ).
4. ໂຄງການຕິດໄຟເຍືອງ ໃນວັດໃຫຍ່ຈຳນວນໜຶ່ງ (ແຕ່ລະວັດ).
5. ໂຄງການພັດທະນາແຄມຂອງ ຊົມແສງຕາເວັນ ລັບແສງ (ແຄມຂອງ, ທ່າວັດຈັນ, (ອພບ)
6. ໂຄງການພັດທະນາເຂດຊົມແສງຈັນ ແລະ ກ້ອງສ່ອງດາວ (ທ່ອງທ່ຽວ).
7. ໂຄງການທາສີເຮືອນ ທຸກໆຄອບຄົວ (16 ຖະໜົນມີລັກສະນະບັງຄັບ, ອພບ).

- ມາດຕະການສະເພາະວຽງຈັນສະຫວ່າງ.

• ສົ່ງເສີມຍ້ອງຊົມເຊີຍຄອບຄົວ, ການຈັດຕັ້ງທີ່ປະຕິບັດ ກຳນົດໝາຍສະຫວ່າງດີດ້ວຍການໝາຍ ສະຫວ່າງຂອງອົງການໄຟຟ້າແຫ່ງປະເທດລາວ, ນະຄອນຫລວງວຽງຈັນ.

• ບັນຈຸຄວາມສະຫວ່າງເຂົ້າໃນມາດຖານ ການກໍ່ສ້າງອາຄານ, ສຳນັກງານ, ເສັ້ນທາງ...

ຈ. ສ້າງເມືອງວຽງຈັນ ເປັນນະຄອນສະເໜ່ (Charming City)

- ສະເໜ່ ໝາຍເຖິງ: ຄວາມດຶງດູດ ຄວາມຈັບອົກຈັບໃຈ (ຄົນມີສະເໜ່, ຕົວເມືອງມີສະເໜ່, ເຮືອນມີສະເໜ່) ຫລື ຄວາມຝັກໄຝ່ຝັນຫາ.

- ຄຸນລັກສະນະຂອງຕົວເມືອງ ມີສະເໜ່.

- ນະຄອນທີ່ສ້າງສະພາບແວດລ້ອມອັນອຳນວຍ ສາມາດດູດດຶງແຂກຕ່າງເມືອງມາທ່ຽວ (ເມືອງໜ້າທ່ຽວ).
- ເມືອງທີ່ສ້າງຄວາມປະທັບໃຈ ໃນເວລາພົບເຫັນ ແລະ ພັກພາອາໃສ (ເມືອງໜ້າຢູ່)
- ເມືອງສາມາດນຳເອົາຄວາມຊົງຈຳຢ່າງຍາວນານ ໃຫ້ແຂກຜູ້ເຄີຍມາ (ເມືອງທີ່ຄິດຮອດ ຫລື ໄຝ່ຫາ)

- ກຳນົດໝາຍ ພື້ນຖານສະເໜ່ ຂອງນະຄອນວຽງຈັນ.

- **ສະເໜ່ ທຳມະຊາດ:** ພູມພາບແຜ່ນດິນງົດງາມຄົບຊຸດ, ພູເຂົາ, ທົ່ງພຽງ, ປ່າໄມ້, ສາຍນ້ຳ, ອາກາດອົບອຸ່ນ.

- ທຳມະຊາດ ຍັງຄົງຄຸນຄ່າດັ່ງເດີມເອົາໄວ້: ປ່າທຳມະຊາດ (ພູເຂົາຄວາຍ, ພູພະນັງ), **ດອກໄມ້ບານ ຕະຫລອດປີ** ດອກຈຳປາ, ດອກຄູນ, ດອກໄມ້ປ່າ, ທ້ອງຟ້າສົດໃສ, ອາກາດປອດໂປ່ງ, ສາຍລົມເຢັນ.

- **ສະເໜ່ ເຄຫາສະຖານ:**

ສະຖາປານິກງົດງາມ, ເຮືອນຢູ່ອາໃສບໍ່ສູງ, ກວ້າງຂວາງ, ສຳປະສົບການນຳໃຊ້ດິນເໝາະສົມ ແລະ ລາຄາຖືກ.

- **ສະເໜ່ ອາຫານການກິນ:** ອາຫານສົດ (ບໍ່ມີເຄມີ), ເຂົ້າໜຽວ, ລາບ, ພືດຜັກຈາກທຳມະຊາດ.

- **ສະເໜ່ ສັງຄົມ ເມືອງສະຫງົບ ບໍ່ທັນມີການແຂ່ງຂັນສູງ,** ວັດຖຸບູຮານເກົ່າແກ່, ປະເພນີດັ່ງເດີມ, ຊຸດນຸ່ງຖືຂອງແມ່ຍິງງົດງາມ ຂອງຄົນວຽງຈັນງ່າຍດາຍ, ຊື່ຕົງ ຮັກແຂກຫລອມຄົມ, ຮັກສິລະປະ ແລະ ເມືອງແຫ່ງບຸນ (City Festival).

- ໂຄງການຮັບປະກັນ ການສ້າງ ນະຄອນວຽງຈັນ ເປັນນະຄອນທີ່ມີສະເໜ່.

1. ໂຄງການປັບປຸງ ແລະ ຂະຫຍາຍແຫລ່ງທ່ອງທ່ຽວ ວັດທະນະທຳ - ທຳມະຊາດ (ພະແນກທ່ອງທ່ຽວ).

- ລາຍການທ່ອງທ່ຽວ ລ່ອງນ້ຳ.
- ນ້ຳຂອງ.

- ຕາດຊອນ.
- ໜອງຫາ.
- ບຶງຫາດຫລວງ (ເມືອງໃໝ່).
- ແຄມຂອງ - (ທ່າວັດຈັນ).
- ຫາດຫລວງ - ສວນໄຊເຊດຖາ.
- ຫໍພະແກ້ວ - ວັດສີສະເກດ.
- ປະຕູໄຊ.
- ຊຽງຄວນ - ສວນວັດທະນະທຳ.

2. ໂຄງການລາຕີວຽງຈັນ (ພະແນກ ຖ.ວ, ທ່ອງທ່ຽວ).

- ການສະແດງ ແລະ ຟ້ອນລາວຄົບຊຸດ; ຊົມຕາເວັນຕົກແຄມຂອງ(ສວນອະນຸວົງ) 2010
- ຕະຫລາດກາງຄືນ ສວນຮ່ອງທອງ 2009.
- ເດີນເຮືອກາງຄືນໜອງຫາ (ໃໝ່ 2010).
- ເດີນກ່ຳປັ່ນກາງຄືນ ບຶງຫາດຫລວງ (ໃໝ່ 2010).
- ປັບປຸງຍົກລະດັບຮ້ານບັນເທີງ ມວນຊົນໃຫ້ມີ ມາດຖານສູງ-ກາງ.

3. ໂຄງການບູລະນະປະຕິສັງຂອນ ວັດຖຸບູຮານເກົ່າແກ່(ພະຫາດຫລວງ, ປະຕູໄຊ, ວັດສີສະເກດ, ຫໍພະແກ້ວ, ກຳແພງເມືອງ, ຫໍພິພິຕະພັນ ໄກສອນ, ອະນຸສອນສະຖານກຳແພງເມືອງ, ຫລັກເມືອງ, ຫໍທຳມະສະພາ) (ພະແນກ ຖ.ວ ແລະ ທ່ອງທ່ຽວ).

4. ໂຄງການຝຶກອົບຮົມພະນັກງານນຳທ່ຽວ, ພະນັກງານໂຮງແຮມ, ພະນັກງານຕຳຫລວດ ກວດຄົນເຂົ້າເມືອງ, ພະນັກງານພາສີ - ອາກອນ, ຄູ, ໂຄສົກ, ນາງແບບ.(ພະແນກ ຖ.ວ ແລະ ທ່ອງທ່ຽວ).

5. ໂຄງການພັດທະນາການອອກແບບ ເຄຫາສະຖານ ແລະ ຜັງເມືອງນ້ອຍ, ຜັງບ້ານ (ພະແນກ ຍທຂ).

6. ໂຄງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດ, ສົ່ງເສີມຊຸດນຸ່ງ, ການແຕ່ງກາຍຊົງຊາຍ - ຊົງຍິງ ແລະ ເດັກນ້ອຍ (ສະຫະພັນແມ່ຍິງ ນະຄອນຫລວງວຽງຈັນ).

- ມາດຕະການສະເພາະ ຂອງການສ້າງສະໜ່ວຽງຈັນ.

- ສົ່ງເສີມຄວາມງາມໃຫ້ກຽດແກ່ວິຈິດສິນ.
- ປະກວດ ແລະ ໃຫ້ມາດຖານຕໍ່ແຫລ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ, ງານປະເພນີ.

• ອອກລະບຽບ ບູລະນະຮັກສາອາຄານເກົ່າ 150 ປີ (ມໍລະດົກ); ສະຫງວນລິຄະສິດ ຊຸດນຸ່ງປະຈຳຊາດ ແລະ ອາພອນເອກະລັກວຽງຈັນ.

ສ. ສ້າງນະຄອນວຽງຈັນ ເປັນເມືອງສີວິໄລ (Civilised City)

- ສີວິໄລ ໝາຍເຖິງຄວາມງົດງາມ ແລະ ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຊີວິດຈິດໃຈຂອງພົນລະເມືອງໃນສັງຄົມ ແລະ ໃນຕົວເມືອງ(ບໍ່ລາມົກ ແລະ ບໍ່ປ່າເຖື່ອນ).

- ຕົວເມືອງສີວິໄລ ໝາຍເຖິງຊຸມຊົນ ທີ່ບັນລຸມາດຖານການດຳລົງຊີວິດໃໝ່ກ້າວໜ້າ, ມີຄວາມຈະເລີນວັດທະນາ, ຜ່ານພົ້ນສະພາວະທຸກຍາກ ແລະ ດ້ອຍພັດທະນາ, ສັງຄົມຍຸດຕິທຳ, ສະຫງົບສຸກ, ວັດທະນາທຳ ກ້າວໜ້າ ວິທະຍາສາດ ຄອບຄອງການດຳລົງຊີວິດ ແລະ ບໍ່ເຊື່ອຖືງົມງວາຍເກີນຂອບເຂດ.

- ກຳນົດໝາຍສ້າງເມືອງວຽງຈັນ ເປັນນະຄອນສີວິໄລ.

ສີວິໄລດ້ານວັດຖຸ.

• ນະຄອນມີໂຄງລ່າງ ຄົມມະນາຄົມດີ, ເຄຫາສະຖານສີວິໄລ, ບໍ່ມີສະລຳ, ຖະໜົນຫົນທາງປູຢາງ ຫລື ບໍ່ເປື້ອນ, ສາທາລະນະປະໂຫຍດ, ບ້ານເມືອງ ແລະ ສຳນັກງານມີແຜນຜັງພັດທະນາໃນທ່າອ່ຽງກ້າວໜ້າສົມເຫດສົມຜົນ.

• ປະຊາຊົນພົນລະເມືອງມີວຽກເຮັດງານທຳ, ບໍ່ມີໄພວ່າງງານ, ມີລາຍຮັບພຽງພໍໃຫ້ການດຳລົງຊີວິດ.

+ ສີວິໄລດ້ານສັງຄົມ: ຊຸມຊົນສີວິໄລກ້າວໜ້າ, ສ້າງສັນສາມັກຄີ, ຮັກໄຄ່ປອງດອງ, ບ້ານປອດຄະດີ, ຄອບຄົວຢູ່ດີມີສຸກ, ການພົວພັນລະຫວ່າງຄົນກັບຄົນ ເປັນອ້າຍເປັນນ້ອງຕົນ ເພື່ອທຸກຄົນ ແລະ ທຸກຄົນເພື່ອຕົນ.

+ ດ້ານວັດທະນະທຳປະເພນີສີວິໄລ:

• ວັດທະນະທຳຂອງວຽງຈັນ ແມ່ນສັງລວມວັດທະນະທຳ ຂອງຊາດລາວທົ່ວປະເທດ ມີຫລາຍສີສັນ, ເປັນກຳລັແຮງ, ເປັນເປົ້າໝາຍທັງເປັນກົນໄກຂອງການປົກປັກ ນະຄອນຫລວງ ແລະ ສ້າງຄວາມກ້າວໜ້າໃນການດຳລົງຊີວິດ ແລະ ເຄື່ອນໄຫວດ້ານຕ່າງໆ ຂອງຊາວນະຄອນ.

• ປະເພນີທີ່ດີງາມຊາວເມືອງ ຖືກຮັກສາໄວ້ ແລະ ເສີມຂະຫຍາຍ, ພ້ອມກັນນັ້ນ ກໍ່ຕໍ່ສູ້ຜ່ານຜ່າກັບປະເພນີງົມງວາຍ ໄຮ້ເຫດຜົນ ແລະ ລາມົກ.

+ ແນວຄິດຈິນຕະນາການ ສີວິໄລ. ປະຊາຊົນພົນລະເມືອງ ບັນລຸມາດຖານຄວາມກ້າວໜ້າ ໃນລະດັບແນ່ນອນ, ດຳລົງຊີວິດເຄື່ອນໄຫວຢືນຢູ່ບົນພື້ນຖານວິທະຍາສາດ ເຕັກໂນໂລຊີໃໝ່; ເສດຖະກິດ ສະຕິປັນຍາແຜ່ຜາຍ ແລະ ປົກຄຸມໃນໝູ່ປັນຍາຊົນ ຊັ້ນຄົນທີ່ນຳໜ້າ.

+ ຊຸມຊົນ (ບ້ານ) ປອດຄົນຂໍທານ, ປອດຄົນພະເນຈອນ.

- ໂຄງການສ້າງຕົວເມືອງ ວຽງຈັນ ສີວິໄລ ໄລຍະຮອດປີ 2010.

1. ໂຄງການກຳນົດຜັງເມືອງວຽງຈັນ ສະບັບໃໝ່ ສະບັບທີ 3 (ພະແນກ ຍທຂ ແລະ ອົງການກ່ຽວຂ້ອງ).

2. ໂຄງການປະຕິສັງຂອນ ວັດຖຸບູຮານ, ປູຊະນີຍະສະຖານ: ທາດຫລວງ, ຫໍພະແກ້ວ, ວັດສີສະເກດ, ຫໍຫຳມະສະພາ, ປະຕູໄຊ, ກຳແພງເມືອງ (ພະແນກ ຖ.ວ ແລະ ອົງການ ກ່ຽວຂ້ອງ).

3. ໂຄງການອົບຮົມການອອກແບບ ແລະ ຄຸ້ມຄອງການປຸກສ້າງອາຄານເຮືອນຊົງລາວ ແລະ ຊົງທັນສະໄໝ (ສະຖາປານິກ, ສະຖາບັນຜັງເມືອງ).

4. ໂຄງການເຜີຍແຜ່ ວິທະຍາສາດ ວິທະຍາການໃໝ່ ຕໍ່ສູ້ກັບຄວາມງົມງວາຍຫລ້າຫລັງ.

5. ໂຄງການບຳລຸງສ້າງມາລະຍາດ ແລະ ວິຖີຊີວິດຂອງຊາວນະຄອນວຽງຈັນ.

- ມາດຕະການສະເພາະສ້າງຄວາມສີວິໄລ.

• ສົ່ງເສີມຄວາມກ້າວໜ້າ, ປະດິດສ້າງ, ການນຳໃຊ້ວິທະຍາສາດ - ເຕັກໂນໂລຊີໃໝ່ ດ້ວຍການໃຫ້ລາງວັນຂອງອົງການກ່ຽວຂ້ອງຕ່າງໆ.

• ຕຳນິວິຈານການປະພຶດທີ່ເປັນອາມາຈານ, ລາມົກ ແລະ ດຳເນີນມາດຕະການຕໍ່ຜູ້ ກະທຳຜິດ ຕາມລະບຽບກົດໝາຍກ່ຽວຂ້ອງ.

IV. ຂັ້ນຕອນ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ.

1. ຂັ້ນຕອນການປະຕິບັດ.

• **ໄລຍະ I.** ແຕ່ 12 ຕຸລາ 2007-12 ຕຸລາ 2009 (ກ່ອນຊີເກມ ຄັ້ງທີ 25) ໃຫ້ສຳເລັດ ການເຜີຍແຜ່ເຊື່ອມຊຶມແນວຄິດ **6 ສ** ສ້າງໃຫ້ມີກົນໄກ ແລະ ພາກສ່ວນຮັບຜິດຊອບແຕ່ລະ **ສ** ແຕ່ລະໂຄງການ ແລະ ເລັ່ງສຸມໃສ່ **ສ1, ສ2, ສ3.**

• **ໄລຍະ II.** ແຕ່ 12 ຕຸລາ 2009 ຮອດທ້າຍປີ 2010 ໃຫ້ສືບຕໍ່ປະຕິບັດ ແລະ ສຸມໃສ່ທັງ ໝົດ **6 ສ** ແລະ ເນັ້ນໃສ່ ສ 1, 2, 3, 4, 5, 6 ດຳເນີນການກວດກາສະຫລຸບບົດຮຽນຍ້ອງຍໍ ສັນລະເສີນ.

• **ໄລຍະ III.** ແຕ່ຕົ້ນປີ 2011 ໄປຫາສຳເລັດກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ກອງ ປະຊຸມເລືອກຕັ້ງ ສສ ຊຸດທີ VII ແລະ ງານສະເຫລີມສະຫລອງ ບຸນພະທາດຫລວງ ຄົບຮອບ 450 ປີ (2011) ໂດຍເນັ້ນໃສ່ທຸກ **ສ.**

• **ໄລຍະ IV**. ແຕ່ 2012 ຫາ 2015 ໄລຍະເລັ່ງລັດການພັດທະນາ ນະຄອນຫລວງວຽງຈັນ ນຳເອົາ ນະຄອນຫລວງວຽງຈັນ ຫລຸດພົ້ນຈາກຄວາມທຸກຍາກ ແລະ ດ້ອຍພັດທະນາຂັ້ນພື້ນຖານ ໂດຍເອົາໃຈໃສ່ທຸກ 6 ສ ແຕ່ເນັ້ນໜັກ **ສ1, ສ2, ສ5.**

2. ມາດຕະການຈັດຕັ້ງປະຕິບັດ 6 ສ.

1. ສຶກສາອົບຮົມ ນຳ້ໃຈຮັກຊາດ ຮັກນະຄອນຫລວງ ປະກອບສ້າງແນວຄິດ 6 **ສ** ໃຫ້ຊາວນະຄອນຫລວງ ທຸກຊັ້ນຄົນເພດໄວ ໃຫ້ເປັນຂະບວນຕົວຈິງ.

2. ເປີດປັ້ນແຂ່ງຂັນສ້າງ ນະຄອນຫລວງວຽງຈັນ 7 ຂໍ້ ແລະ 6 ສ ເປັນໃຈກາງ ຂົນຂວາຍ ແນະນຳ, ຈັດຕັ້ງເຍົາວະຊົນ, ຊາວໜຸ່ມ ໃນຊັ້ນປະຖົມ ແລະມັດທະຍົມ, ຄອບຄົວ, ບ້ານ, ສຳນັກງານ, ວິສາຫະກິດຂອງຕົນ ເຄື່ອນໄຫວໃນຂອບເຂດຂອງຕົນ ແລະ ຊ່ວຍເຫລືອບ້ານ, ຄອບຄົວ ພາກສ່ວນອື່ນທີ່ຍັງຫຍຸ້ງຍາກ ບໍ່ສາມາດເຮັດໄດ້ 6 ສ.

3. ຫັນລົງຮາກຖານ ເອົາໃຈໃສ່ສ້າງບ້ານພັດທະນາ ບ້ານ 6 ສ ຫລື ບ້ານສະຫງົບສຸກ, ບ້ານປອດຄະດີ, ປອດຢາເສບຕິດ, ບ້ານວັດທະນະທຳ, ບ້ານສາທາລະນະສຸກ... ຕາມຄວາມເປັນຈິງຂອງບ້ານນັ້ນ.

4. ຫັນ 6 ສ ເປັນໂຄງການ, ເປັນແຜນປະຕິບັດ ໂດຍໃຫ້ສ່ອງແສງອອກໃນແຜນພັດທະນາຕົວຈິງ ຢູ່ຂະແໜງການຂອງທົ່ວ ນະຄອນຫລວງວຽງຈັນ (ເມືອງ, ບ້ານ, ສຳນັກງານ ແລະ ຂອງທຸກພາກສ່ວນ).

5. ກົນໄກການປະຕິບັດ 6 ສ ກວມເອົາທຸກການຈັດຕັ້ງພັກ, ອຳນາດການປົກຄອງ,ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ, ວັດ, ໂບດ **ໂດຍແມ່ນ ຫົວໜ້າບ່ອນນັ້ນ ເປັນຜູ້ຮັບຜິດຊອບ** ຜົນສຳເລັດ ແລະ ບໍ່ສຳເລັດ.

6. ລາຍງານສ່ອງແສງ ເປັນປົກກະຕິໃຫ້ ນະຄອນຫລວງວຽງຈັນ ແລະ ຈັດຕັ້ງກວດກາ ດຳເນີນການຍ້ອງຍໍ ແລະ ຕິຕຽນຕາມລະບຽບກົດໝາຍ.

ລວມຄວາມ : ເຫດການທັງໝົດໃນປະຫວັດສາດ ແມ່ນໝາກຜົນ ແຫ່ງການເຄື່ອນໄຫວຂອງປະຊາຊົນລາວ, ຊາວນະຄອນຫລວງວຽງຈັນ ພາຍໃຕ້ການນຳພາ ຂອງບັນພະບູບຸດ ໃນຍຸກສະໄໝນັ້ນໆ ເຫດການເຫລົ່ານັ້ນຍັງຝັງເລິກໄວ້ໃນດວງໃຈ ຂອງຊາວເມືອງວຽງຈັນ ກາຍເປັນຄວາມເອກອ້າງທະນົງໃຈ ເປັນມູນເຊື້ອ ແລະ ເປັນກຳລັງໃຈ ໃຫ້ຊາວ ນະຄອນວຽງຈັນ ທຸກຮຸ້ນຄົນ ຮ່ຳຮຽນສືບຕໍ່ ແລະ ກ້າວຂຶ້ນເພື່ອປົກປັກຮັກສາ ແລະ ສ້າງສານະຄອນ ຂອງຕົນໃຫ້ຈະເລີນວັດທະນາຕໍ່ໄປ. 6 ສ ເປັນຫົວຄິດລິເລີ່ມຂອງ ນະຄອນຫລວງວຽງຈັນ ແລະ ກາຍເປັນພັນທະ, ຄວາມຮັບຜິດຊອບ ຂອງຊາວ ນະຄອນຫລວງວຽງຈັນ, 6 **ສ** ຖືກປະຕິບັດໄປດ້ວຍດີ ຈະເຮັດໃຫ້

ໂສມໜ້າຂອງຕົວເມືອງວຽງຈັນ ມີການປ່ຽນແປງໃໝ່, ປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະ ກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ເວົ້າລວມ, ເວົ້າສະເພາະ ການສະເຫລີມສະ ຫລອງ ວັນວຽງຈັນ, ຖິ່ນະຄອນຫລວງວຽງຈັນ ຄືເຮືອນລວມຂອງພວກເຮົາ ແລະ ຂອງຕົນເອງ; (Vientiane City - My Home) ເຮົາຕັດສິນໃຈປົກປັກຮັກສາ ແລະ ພັດທະນານະຄອນຫລວງ ວຽງຈັນ ໃຫ້ສົມກຽດກັບເປັນເມືອງຫລວງຂອງປະເທດຊາດ, ໃຫ້ເປັນເມືອງໜ້າຢູ່ ແລະ ຍືນຍົງ ຕະຫລອດໄປ (Live able and Sustainable City).

ເອກະສານອ້າງອີງໃນການຊອກເກັບກຳຂໍ້ມູນ ແລະ ເນື້ອໃນນຳມາຄົ້ນຄວ້າ ຂຽນປຶ້ມປະຫວັດສາດ ນະຄອນຫລວງວຽງຈັນ 450 ປີ.

ການຈັດຕັ້ງຊອກຫາຂໍ້ມູນ ເອກະສານ ທີ່ພົວພັນ ແມ່ນໄດ້ປະຕິບັດຊອກຫາທັງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ບັນດາຂໍ້ມູນທີ່ໜ້າເຊື່ອຖື ແລະ ຮີບໂຮມ ຂຽນເປັນປຶ້ມ ມີຄືດັ່ງນີ້:

1. ປຶ້ມ 3 ອານາຈັກ (ຫລວງພະບາງ, ວຽງຈັນ ແລະ ຈຳປາສັກ) ຂອງທ່ານ ເຫລົ່ອມ ອິນ ສີຊຽງໃໝ່.

2. ປຶ້ມປະຫວັດສາດລາວ ດຶກດຳບັນ ເຖິງປະຈຸບັນຂອງກະຊວງຖະແຫຼງຂ່າວ ແລະ ວັດ ທະນະທຳ ໂດຍທ່ານ ໂອສະກັນ ທຳມະເທວາ " ຊົ້ນຳ " ຈັດພິມ ປີ 2000.

3. ປຶ້ມບັນດາກະສັດລາວ ແຕ່ລະຍຸກ ແຕ່ລະສະໄໝ.

4. ບາງຕອນຂອງບົດຖະແຫຼງຂ່າວຂອງ ທ່ານ ດຣ. ສິນລະວົງ ຄຸດໄພທູນ ກ່ຽວກັບການ ສະເຫລີມສະຫລອງ ນະຄອນຫລວງວຽງຈັນ 450 ປີ.

5. ນະຄອນຫລວງວຽງຈັນ ສະໄໝຝຣັ່ງ ປົກຄອງ ຂອງທ່ານ ຫີມມະກອນ ມະໂນທຳ.

6. ນະຄອນຫລວງວຽງຈັນ ສະໄໝອານາຈັກລ້ານຊ້າງ ຂອງ ທ່ານ ຫີມມະກອນ ມະໂນທຳ.

7. ເບິ່ງບົດຮຽນ ປະຫວັດສາດ ຄົບຮອບ 1000 ປີ ຂອງການສ້າງຕັ້ງ ນະຄອນຫລວງ ຮ່າ ໂນ້ຍ (ທັງລ້ອງ) ຫວຽດນາມ.

8. ປຶ້ມປະຫວັດສາດ (ແກຣມແລ້ງ) ນະຄອນຫລວງ ມິສສະກູ ແຫ່ງສະຫະພັນລັດເຊຍ.

9. ປຶ້ມປະຫວັດສາດລາວ ອານາຈັກລາວລ້ານຊ້າງ ທີ່ຄົນໄທ ຂຽນສອງເຫລັ້ມ (ໄດ້ຈາກ ຫໍສະໝຸດຂອງໄທ).

10. ປຶ້ມ ປະຫວັດສາດ ຂອງພັກ ປະຊາຊົນ ປະຕິວັດລາວ ທີ່ພົວພັນເຖິງວຽງຈັນ.

11. ປຶ້ມ ປະຫວັດສາດລາວ ແລະ ຄົນລາວດຶກດຳບັນ.

12. ບັນດາມະຕິຂອງຄະນະພັກ, ແຜນພັດທະນາ ເສດຖະກິດ - ສັງຄົມ ຂອງ ນະຄອນ ຫລວງວຽງຈັນ ພາຍຫລັງ ຍຶດອຳນາດການປົກຄອງ, ສ້າງຕັ້ງລະບອບໃໝ່ ສປປ ລາວ ປີ 1975 ເຖິງປີ 2010.

ນອກຈາກນີ້ ຍັງມີເອກະສານຂໍ້ມູນອື່ນໆ ທັງໄດ້ຈາກລວມໝູ່ ແລະ ບຸກຄົນ, ພະນັກງານ ແລະ ບຸກຄົນອາວຸໂສ ຂອງລາວ ແລະ ຕ່າງປະເທດ, ເຊັ່ນ: ຈາກບາງບົດຂອງ ວັນວຸສະຕິບ ແລະ ຜູ້ອື່ນ ຈຳນວນໜຶ່ງ.

13. ຄວາມເປັນມາຂອງ ນະຄອນຫລວງວຽງຈັນ, ເຫລັ້ມທີ 1, " ເມືອງວຽງຈັນ ສະໄໝບູຮານ ". ຮຽບຮຽງໂດຍ: ຫ້ອງມະຫອນ ມະໂນທັມ, 2009.

14. ຄວາມເປັນມາຂອງ ນະຄອນຫລວງວຽງຈັນ, ເຫລັ້ມທີ 2, " ນະຄອນວຽງຈັນ ສະໄໝອານາຈັກລ້ານຊ້າງ ", ຮຽບຮຽງໂດຍ: ຫ້ອງມະຫອນ ມະໂນທັມ, 2009.

15. ປະຫວັດສາດລາວ ແຕ່ບູຮານເຖິງ 1946, ຂຽນໂດຍ: ມະຫາສີລາ ວີຣະວົງ.

16. ປະຫວັດສາດລາວ, ຮຽບຮຽງໂດຍ: ມະຫາຄຳ ຈຳປາ ແກ້ວມະນີ ແລະ ຄະນະ, ກະຊວງສຶກສາທິການ, 1971.

17. ປະຫວັດສາດ ເສດຖະກິດລາວ, ໂດຍອາຈານ ເດຊານຸລາດ ແສນດວງເດດ, 2008.

18. ສຳມະນາປະຫວັດສາດລາວ, ກະຊວງສຶກສາທິການ, ສິລະປະກອນ ແລະ ກິລາ - ຍຸວະຊົນ, 1994.

19. ສຳມະນາປະຫວັດສາດລາວ, ຕາມທາຮອຍເຈົ້າອະນຸວົງ, ມະຫາວິທະຍາໄລແຫ່ງຊາດ, 1997.

20. ພື້ນວຽງ ສະໄໝເຈົ້າອະນຸວົງ, ມະຫາວິທະຍາໄລແຫ່ງຊາດ 2004.

21. ທ້ອນໂຮມຊົນນະບົດ ແລະ ຕົວເມືອງເກົ່າ, ຮຽບຮຽງໂດຍ: ອາຈານ ອິນແກ້ວ ວຽງວິໄຊ, ອາຈານ ທອງໄມ ໄຊຍະສິງ ແລະ ອາຈານ ຄຳປ່ຽນ ບູລົມ, 2008.

22. ວີຣະກັມ ເຈົ້າອະນຸວົງ; ສະຖາບັນຄົ້ນຄວ້າວັດທະນະທຳ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, 2003.

23. ວີຣະກຳເຈົ້າອະນຸວົງ, ສະຖາບັນຄົ້ນຄວ້າວັດທະນະທຳ, ວຽງຈັນ, 2003.

24. ມະຫາສີລາວີຣະວົງ, ປະຫວັດສາດລາວ ແຕ່ບູຮານເຖິງ 1946, ຫໍສະໝຸດແຫ່ງຊາດ ວຽງຈັນ 2001.

25. Henri Deydier, Introduction a la connaissance du LAOS, Imprimenie Francaisc d' Extreme Orient Saigon 1952.

26. Presence du Rogaume Lao (ສຳພາສ ຣາຊອານາຈັກລາວ), France - Asie, Mars - Avril 1956 , Saigon.

27. Pierre Bunard La Font, Apercus sur le Laos, Comite des L'Alliance, Francaise au Laos 1959.

28. Etienne Aymonier, Voyages dans le Laos, Paris 1895.

29. Fabric Mignot, Etienne Aymonier - La societe du Laos siamois au XIX em Siecle, L'Harmattan Paris 2003.

30. ກ່ຽວກັບເມືອງລາວ ສະໄໝສະຕະວັດ XVII.

31. ຄຸນພໍ ມາຣິນີ, ປະເທດລາວໃນຊຸມປີ ຄສ 1640, ແປໂດຍ: ທຸມພັນ ຣັດຕະສະວົງ, ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີ ແລະ ພາສາລາວ ວຽງຈັນ.

ສະບັບເປັນພາສາຝຣັ່ງຊື່ວ່າ: Relation mouvelle et curiense de Lao, Traduite de L'Italiers du P. de Marini Romain .

32. Jean- Claude Le joine, Le Journd de voyage de Gerrit Van Wuys thoft et ser assistants au Laos (1641 - 1642), Centre de Dourmentation et d'Information sur le Laos, 2 em edition 1993.

33. ທິນມະກອນ ມະໂນທຳ ຄວາມເປັນມາ ດ້ານຜັງເມືອງ ຂອງນະຄອນຫລວງວຽງຈັນ ສະໄໝລາວ ເປັນອານານິຄົມຂອງຝຣັ່ງ, ວຽງຈັນ 2009.